# ປະວັດສາດສົງຄາມສໄມປີ 1945-1975
# ແລະຊີວິດກາຍເປັນອົພຍົບຂອງຄົນລາວ


ບັນທຶກໂດຍ

ພ.ອ. ວ່າງເຢີ

ອາດີດ ນາຍທະຫານກອງທັບແຫ່ງຊາດ

ພຣະຣາຊອານາຈັກລາວ





ເມືອງລາວເປັນປະເທສນ້ອຍ, ຂາດທາງອອກສູ່ທະເລໄປສູ່ພາຍນອກ ແລະຢູ່ໃນຖ້າມກາງ ຂອງຫລາຍປະເທສ ທີ່ມີປະຊາຊົນລົ້ນເຫລືອ ຈຶ່ງປ້ອງກັນຍາກ ດ້ານການແຊກຊຶມ ຂອງຕ່າງດ້າວ, ບໍ່ມີຄວາມປອດໄພ ແລະຍາກທີ່ຈະມີຄວາມສງົບໄດ້

<u>ປື້ມຈັດພິມໃນເດືອນມົກກະຣາ 2012</u>


**Unforgettable Laos (PDF version in Lao) – Updated on June 13, 2015**


All rights reserved to Geu VANG. Unauthorized printing, distributing, and selling this document is forbidden

www.unforgettable-laos.com

# ສາຣະບັນ


ສາຣະບັນ ..................................................................................................2
ຄຳນຳ ......................................................................................................6
ປວັດຜູ້ຂຽນ ...............................................................................................6
ພາຄທີ່ 1. ..................................................................................................10
ປວັຕເຫຕການຕ່າງໆກ່ອນປີ 1954..........................................................10
ຂໍ້ບັນທຶກໂດຍທ່ານຕູ້ເລັ້ຍ ລີຟຸງ ..............................................................10
ປວັດສາຕ ຊຸມຊົນເຜົ່າລາວສູງ "ມົ້ງ"ແລະ ການເຄື່ອນໃຫວຕ່າງໆ ......................10
ຊີວະປວັດຫຍໍ້ຂອງ ທ່ານ ຣ.ທ. ວ່າງຈົງ ຫລື ວ່າງຈົງຕົວ ................................30
ການປະຕິບັດງານຂອງ ພ.ອ. ແມສນິເອ ........................................................46
ການໂຈມຕີຈາກທາງອາກາສດ້ວຍການໃຊ້ເຄື່ອງສັນຍານ ..................................47
ວຽດນາມເໜືອ ລຸກລານ ຣາຊອານາຈັກລາວ ..................................................48
ວຽດນາມຖືກແບ່ງແຍກເປັນສອງພາຄ ........................................................56
ພາຄທີ່ 2. ..................................................................................................60
ການສູ້ລົບໃນລະຫວ່າງປີ 1960...................................................................60
ໜີລອດອອກຈາກບອມຫລົງ (LS32) ............................................................65
ການຈັດຕັ້ງຄ້າຍທະຫານໃນແຂວງຫົວພັນ ......................................................68
ພາຄທີ່ 3. ..................................................................................................77
ການຂຍາຍດ້ານທາງທະຫານຫລັງຈາກເສິກພູຜາທີ ........................................77
ປວັດຂອງທ່ານ "ທອມລອມ" ທີ່ປຶກສາຂອງສະຫາຣັຖ ....................................79
ຢູ່ໃນທະຫານພາຄ 2 ..................................................................................79
ສນາມບິນ ແລະ ລີມາໄຊ............................................................................92
ສັນຍາລະຫວ່າງສາມເຈົ້າລາວ ....................................................................94
ພາຄທີ່ 4. ..................................................................................................97
ການຈັດຕັ້ງຝ່າຍພົນລະ ເມືອງໃນເຂຕທະຫານພາຄ 2.....................................97
ໂຮງຮຽນປະຖົມສຶກສາ...............................................................................97
ມັທະຍົມຊຳທອງ.......................................................................................99
ຝ່າຍຕຳຣວຈ ...........................................................................................100
ການຈັດຕັ້ງ ການປົກຄອງແຂວງ .................................................................101
ການພົວພັນກັບສົງຄາມອິນດູຈີນຂອງຍາຫລວງບູນຈັນ...................................105
ຢູ່ນຳທ່ານນາຍພົລ ວ່າງປາວ 1962 ເຖິງ 1975 ............................................110




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຝ່າຍໝໍ່ຢູ່ພາຄສອງ........................................117
ນັກບິນກອງທັພແຫ່ງຊາດພາຄ 2........................................118
ນັກບິນຮຸ່ນທີ່ 1........................................119
ນັກບິນຮຸ່ນທີ່ 2........................................120
ນັກບິນຮຸ່ນທີ່ 3........................................124
ນັກບິນຮຸ່ນທີ່ 4........................................131
ນັກບິນຮຸ່ນທີ່ 5 ຮຸ່ນສຸດທ້າຍ........................................131
ທີມເຣເວນ (Team Ravens)........................................134
ພາຄທີ່ 6........................................136
ການຈັດຕັ້ງຝ່າຍທະຫາຣພາຄ 2........................................136
ນາຍທະຫາຣຄົນສຳຄັນຂອງພີ່ນ້ອງລາວມົ້ງ........................................138
ນາຍທະຫາຣຄົນສຳຄັນຂອງພີ່ນ້ອງລາວລຸ່ມ........................................147
ການປະກອບກຳລັງທະຫາຣ 1951-1964........................................149
ພາຄທີ່ 7........................................151
ການສູ້ຮົບກັບວຽດນາມເໜືອ........................................151
ແຜນຍຶດທົ່ງໄຫຫີນ........................................162
ພາຄທີ່ 8........................................167
ອົພຍົບອອກຈາກພາຄ 2 ແລະ ຣາຊອານາຈັກລາວ........................................167
ພາຄທີ່ 9........................................179
ບັນຫາສົງຄາມອິນດູຈີນ........................................179
ຄຳຖາມແລະຄຳຕອບ........................................179
ເປັນຫຽັງອາເມຣິກາຈຶ່ງຕ້ອງຖອນອອກຈາກສົງຄາມອິນດູຈີນ?........................................186
ປັຈສິມມະວາຈາ ຂອງສະເດັດເຈົ້າສຸພານຸວົງ........................................191
ພຍາພູມີວົງວິຈິດ........................................193
ພາຄທີ່ 10........................................194
ແຜນການລຶກລັບແລະຫລອກລວງຂອງຄອມມຸຍນິສ........................................194
ກ- ການວາງແຜນກືນກິນລາວໃນລະຍະສັ້ນ........................................194
ຂ- ແຜນກືນກິນລາວຖາວອນ........................................197
ຜົລດີແລະຜົລເສັຍຂອງການເປັນອົພະຍົບ ໄປຢູ່ ຕ່າງປະເທສ........................................200
ພາຄທີ່ 11........................................204
ການຈັດຕັ້ງຣັຖບາລຊຸດຕ່າງໆ........................................204




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພາຄທີ່ 12. 232
ເຫດການສັບສົນໃນນາທີສຸດທ້າຍ 232
ການຈັດຕັ້ງຣັຖບາລ ປະສົມລາວສອງຝ່າຍ 236
ພາຄທີ່ 13. 241
ຣັຖບາລສອງຝ່າຍຊຸດທີ່ສາມແລະຊຸດສຸດທ້າຍ 241
ຄນະມົນຕຣີປະສົມການເມືອງ 243
ສົນທິສັນຍາລະຫວ່າງໄກສອນແລະເລດວນ 252
ພາຄທີ່ 14. 257
ການຈັດຕັ້ງປ້ອງກັນປະເທສໃນສໄມເກົ່າ 257
ພາຄທີ່ 15. 271
ການສຶກສາ ແລະ ສຸຂພິບານ 271
ການສຶກສາ 271
ສຸຂະພິບາລ (ຝ່າຍໝໍ) 273
ພາກທີ່ 16. 275
ການເມືອງລາວ ແມ່ນນະໂຍບາຍຂອງລາວບໍ? 275
ກົນອຸບາຍຂອງ 21 ອົງການ 279
ແຜ່ນການທຳລາຍ 280
ຄນະ 21 ອົງການ 284
ນະໂຍບາຍແກ່ທະຫາຣຝ່າຍວຽງຈັນທນ໌ ແລະ ວ່າງປາວ 286
ພາຄທີ່ 17. 289
ບັນຫາລາວເກີດໄດ້ດ້ວຍເຫຕໃດ? 289
ສິ່ງທີ່ສ້າງບັນຫາ 289
ພາຄທີ່ 18. 297
ຊີວິດອົພຍົບຕົກບ້ານຕົກເມືອງ 297
ພາຄທີ່ 19. 315
ເຫຕການທີ່ຜ່ານມາແລະຄວາມເຫັນໃນອານາຄົດ 315
ຄວາມຄິດເຫັນສ່ວນຕົວຂອງ ອຣິຍະ ລີຝູງ 323
ພາຄທີ່ 20. 329
ຊີວະປະວັຕຂອງບຸກຄົນສຳຄັນ 329
1. ທ່ານເຈົ້າແຂວງສາຍຄຳ ສຸທະກະກຸມາຣ 329
2. ພຣະຍາດຳຣົງຣິທິໄກ ຕູ້ບີ ລີຝູງ 331


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

3. ພົນຕຣີ ວ່າງປາວ....333
4. ພຣະຍາ ຕຸລາປະສິທ ຕູ້ເຢີ ລີຝຸງ....336
5. ພ.ອ. ເມສນິເອ (Col. Mesnier)....338
6. ຣ.ອ. (ນາຍພົລ ຈັຕຕະວາ) ກອງແລ....338
7. ພ.ຕ.ຕ. ຮັງດິວ....339
8. ຍາຫລວງ ບູນຈັນ ວຸທິສີສົມບັດ....339
9. ທ່ານເຈົ້າເມືອງ ລາວໄທ ທວາລືວ່າງ....342
10. ນັກບິນເຮືອອາກາສ ຮ້ອຍເອກ ເຕ-28 ວ່າງປີ....343
11. ທ່ານອາຣີຍະ ລີຟູງ....344
12. ທ່ານນາຍກອງປະຈ້າລີ ລີເຢັ່ງວື....347
ພາຄທີ່ 21.....349
ກາບກອນເກົ່າຂອງລາວແລະຮູບພາບທີ່ມີຄວາມໝາຍ....349
ຮູບພາບທີ່ມີຄວາມໝາຍ....352
ຮູບພິ່ນອັງ"ມົ້ງ" ຢູ່ຕ່າງປະເທສທີ່ເປັນຕົວຢ່າງໃນສັງຄົມລູ່ນໃໝ່....358
ຮັບຮູ້ເອກາສິດແລະຂອບໃຈນຳເຈົ້າຂອງຮູບ....361

ຖ້າມີຄຳຖາມ ຫລືຢາກຕິດຕໍ່ເພີ່ມເຕີມກັບນັກຂຽນ ເຊີນຕິດຕໍ່

Vang Geu
124 Logan Drive
Mt. Gilead, NC 27306

E-mail: geuvang@gmail.com

Copyright @ 2012-2015 Vang Geu


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ຄຳນຳ

ຂ້າພະເຈົ້າໄດ້ແຕ່ງປຶ້ມເຫລັ້ມນີ້ຂຶ້ນ ເພື່ອນັກອ່ານແລະນັກຄົ້ນຄ້ວທົ່ວໄປ ທີ່ມີຄວາມສົນໃຈ ຢາກຮູ້ວ່າປະວັດສາດຂອງລາວໃນລະຍະຫລັງນີ້ ໄດ້ເກີດຂຶ້ນຍ້ອນຫຍັງ ແລະເຮັດແນວໃດ ປະຊາຊົນລາວ ຈຶ່ງໄດ້ອົບພະຍົບໜີໄປຢູ່ຫລາຍປະເທສໃນໂລກ, ໝົດສິດເປັນປະຊາຊົນລາວ, ຫລັງຈາກໄດ້ມີການຕໍ່ສູ້ລະຫວ່າງລາວສອງຝ່າຍ ຊື່ງໃນທີ່ສຸດ ກໍບໍ່ມີຜູ້ໃດຊນະ. ຜູ້ຊນະສົງຄາມນັ້ນແທ້ ແມ່ນແຕ່ຊາດຕ່າງດ້າວທັງໝົດ. ຂໍໃຫ້ທ່ານອ່ານປວັດຕ່າງໆໃນນີ້ ທີ່ອາດຈະຊ່ວຍໃຫ້ທ່ານເຂົ້າໃຈສະຖານະການໃຫ້ໄດ້ດີກ່ວາເກົ່າ ແລະເປັນບົດຮຽນ ໃຫ້ລາວເຮົາທຸກຄົນໄດ້ປັບຕົວ, ປ່ຽນແຜນ ແລະ ແນວຄິດໃໝ່ ເພື່ອບໍ່ໃຫ້ປະວັດ ສາດຊ້ຳຮອຍອີກ.

ປຶ້ມນີ້ບັນທຶກເຫດການ ທີ່ວຽດນາມເໜືອແຊກແຊງເມືອງລາວ, ການແຕກແຍກຣະຫວ່າງລາວດ້ວຍກັນຊື່ງຕອນສຸດທ້າຍ ພາໃຫ້ຄົນລາວ; ຫລາຍຮ້ອຍພັນຄົນ ຕ້ອງກາຍເປັນອົພະຍົບ, ກາຍເປັນປະຊາຊົນຂອງປະເທສທີ່ຕົນໜີໄປອາສັຍຢູ່ທົ່ວໂລກ. ເປັນປຶ້ມ ທີ່ບັນຣະຍາຍເຫດການຕ່າງໆ ທີ່ໄດ້ເກີດຂຶ້ນໃນແຫລມ, ອິນດູຈີນ ແລະ ໃນພຣະຣາຊອານາຈັກລາວ ໂດຽສະເພາະ ສ່ວນຫລາຍແມ່ນໃນເຂດທະຫານພາຄ 2 ທີ່ປະກອບດ້ວຍແຂວງ ຫົວພັນ ແລະ ແຂວງຊຽງຂວາງ.

# ປວັດຜູ້ຂຽນ



ຂ້າພະເຈົ້າ ວັງເຢີ ເກີດຢູ່ບ້ານຫອ້ມ ຕາແສງຜາໄຊຍ, ເມືອງຜາ ແຂວງຊຽງຂວາງ, ພຣະຣາຊອານາຈັກລາວ ໄດ້ເປັນນາຍທະຫານ ຢູ່ພາຄ 2, ໄດ້ຕໍ່ ສູ້ສົງຄາມສໄມ 1953-1954 ຣ່ວມກັບຝຣັ່ງເສສ, ໄດ້ເຮັດວຽກອ່ານຂ່າວ ໃຫ້ວິທະຍຸກະຈາຍສຽງ ພຣາຊອານາຈັກລາວ; ໄດ້ເຮັດວຽກຢູ່ ຄັງເງີນແຫ່ງຊາດ ທີ່ນະຄອນວຽງຈັນ ແຕ່ປີ 1960-1964 ແລະ ໄດ້ຕໍ່ສູ້ສົງຄາມວຽດນາມ ຣ່ວມກັບສະຫະຣັຖ ໃນສໄມ 1968-1973. ໜ້າທີ່ທາງການທະຫານ ເປັນ ຜ.ບ. ກອງພັນ, ຜ.ບ. ກຣົມ, ຜ.ບ. ກອງພົນ ເພື່ອຕໍ່ສູ້ກັບສັດຕຣູທີ່ມາລຸກລານຣາຊອານາຈັກລາວ, ໃນປີ 1973-1975 ຫລັງຈາກສົງຄາມ ໄດ້ເປັນຫົວໜ້າພັທນາພາຄ 2ໃນພຣະຣາຊອານາຈັກລາວ.

### ດ້ານການສຶກສາ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄດ້ຈົບການສຶກສາໂອບໂລມຄຣູ ທີ່ນະຄອນ ວຽງຈັນທນ໌, ຈົບການສຶກສາດ້ານ ການປູກຝັ່ງ, ລ້ຽງສັດ ແລະ ການພັທນາ ມາຈາກຕ່າງປະເທສ. ໄດ້ຜ່ານການໂອບໂຮມຫລາຍຢ່າງ ດ້ານທະຫາຣ ໃນການປ້ອງກັນປະເທສ, ຮຽນຈົບລັກສູດເສນາທິການ, ໄດ້ຮຽນຜ່ານຫລັກສູດ ດ້ານການພັທນາ, ຫລັກສູດດ້ານຮ່ວມວຽກງານ, ດ້ານອຸປະສັກ, ດ້ານການປົກຄອງ ແລະ ການກຳກັບດ້ານບັນຊີການເງິນ, ແລະ ດ້ານຈິດຕະສາຕ ເພື່ອຊ່ວຍເຫືລອຜູ້ທີ່ມີບັນຫາດ້ານຈິຕໃຈ.

**ພາຄປະເຊີນກັບຊີວິດ**

1975 ໄດ້ເປັນອົພະຍົບໄປຢູ່ຫລາຍປະເທສ ຄື: ຣາຊອານາຈັກໄທ໌ຍ, ຝຣັ່ງເສສ ແລະ ສະຫະຣັຖ ໄດ້ ເປັນຜູ້ນຳຊາວອົພະຍົບຢູ່ນອກປະເທສ ຫລາຍປີຜ່ານມາ. ໄດ້ເຮັດວຽກຢູ່ພາກເໜືອປະເທສຝຣັ່ງເສສດ້ານຊ່ວຍເຫລືອເບິ່ງແຍງຄົນຝຣັ່ງ ດ້ານການເຊົ່າເຮືອນຫລວງ ຫລາຍຮ້ອຍພັນຄົນ, ໄດ້ເປັນປະທານສະມາຄົມຝຣັ່ງ-ເອເຊັຍ (Association Franco-Asiatique) 1976-1980. ໃນເດືອນມີນາ ປີ 1981, ໄດ້ເຂົ້າໄປຕັ້ງຖິ່ນຖ່ານຢູ່ໃນສະຫາຣັຖ ຈົນເຖິງປະຈຸບັນ, ໄດ້ເຮັດວຽກຢູ່ຫ້ອງການຕອ້ນຮັບອົພະຍົບ, ເຮັດວຽກຢູ່ກະຊວງກະສິກັມ ຣັຖມິເນໂຊຕາ ສອນຊາວອົພະຍົບ ຮຽນປຸກຝັ່ງ, ໄດ້ເຮັດວຽກເປັນລອງຫົວໜ້າໂຮງໝໍປົວຄົນເຈັບ (Program Associate-Director, University of Minnesota Hospital) ພ້ອມກັນນີ້ ປີ 1982-1987 ໄດ້ເປັນປະທານສະາຄົມຄອບຄົວລາວ (President, Lao Family Association, Inc.). ໃນປີ 1987, ໄດ້ຕັດສິນໃຈນຳພາ ຊາວອົພະຍົບລາວ ແລະ ລາວສູງ “ມົ້ງ” ຫລາຍພັນຄົນ ໄປຕັ້ງຖິ່ນ ຖານຊີວິດໃໝ່ ຢູ່ຫລາຍຣັຖໃນພາຄຕາວັນອອກຂອງສະຫະຣັຖ ຄື: ຣັຖຢອກເຢັຍ, ຣັຖເຊົ່າໄຄໂຣໄລນາ ແລະ ຣັຖນອສໄຄໂຣໄລນາ. ໃນປີ 1987-2011, ເປັນປະທານສະມາຄົມມົ້ງ-ລາວ ທີ່ຣັຖນອສໄຄໂຣໄລ ນາ (Hmong-Lao Assistance Association, Inc.) ໄດ້ເຮັດວຽກຢູ່ໂຮງງານ ເອກຊົນແມກເຄຣ ອິນເດັສຕຣີ (McRae Industries) ແຕ່ 1987 ຈົນເຖິງປະຈຸບັນ 2011. ໃນເມື່ອວຽກໄດ້ເບົາບາງລົງ ຈຶ່ງໄດ້ບັນທຶກເຫຕການຕ່າງໆຫລາຍປີ ທີ່ຜ່ານມາ ຮ່ວມກັບໝູ່ເພື່ອນຫລາຍທ່ານຄື:

1- ພ. ອ. ທ້າວບອນ
2- ທ່ານລອງເຈົ້າແຂວງຊຽງຂວາງ ບູນຈັນ ວຸດທິສີສົມບັດ
3- ທ່ານອາຣິຍະ ລີຟູງ ນັກຊ່ຽວຊານຝ່າຍກະສິກັມ
4- ທ່ານເຈົ້າເມືອງ ລາວໄທ ຫວາລື ວ່າງ
5- ທ່ານ ພ.ຕ.ຕ. ດົວ ຮັງ
6- ທ່ານ ຣ.ອ.ອ. ບີ ວ່າງ Pilot T-28
7- ທ່ານ ພ.ອ. ຊົ້ງເລັ່ງ ຊົງ
8- ທ່ານ ຄຣູ ບຸດທະລັງສີ ດວງສວັນ
9- ທ່ານ ພ.ທ. ຈູ ວ່າງ
10- ທ່ານ ພ.ທ. ລີ ຈາວ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

11- ທ່ານ ວ່າງເຢັ່ງ ນັກຊ່ຽວຊານດ້ານໄຟຟ້າ (Electrical Engineer)

12- ທ່ານ ພ.ຕ. ສາກົນ ແກ້ວດວງດີ

13- ທ່ານ ພ.ອ. ວ່າງເນັ້ງ

14- ທ່ານ ພ.ຕ. ໂພທິສານ ວັນ

15- ທ່ານ ຣ.ອ. ວ່າງຊ້າງ

16- ທ່ານ ພ.ອ. ມາສ ແມສນີເອ Col. Max MESNIER

17- ທ່ານ ພ.ຕ. ຜານ ຄຳສອນ

18- ທ່ານ ພ.ອ. ຕູ້ພື້ ວ່າງ ຜູ້ຊ່ຽວຊານດ້ານການເມືອງ (Political Science)

19- ນາງ ເຢນີເຝື້ອ ມົ່ວ, ແລະ

20- ຍານາງ ກາເຕີຣິນ ຮອຈ (ທີ່ໄດ້ຊ່ວຍ ແປ ແລະແປງ ສັບໃນຕົ້ນຕົວຂອງປຶ້ມນີ້ ຈາກພາສາລາວ ມາເປັນພາສາອັງກິດ ຢ່າງນ້ອຍ ສາມຄັ້ງ).

ຂ້າພະເຈົ້າຮູ້ສຶກເປັນໜີ້ຄຸນຢ່າງຫລວງຫລາຍນຳ ທຸກທ່ານທີ່ມີຊື່ຢູ່ຂ້າງບົນນີ້ ພ້ອມທັງຫລາຍຄົນອີກ ທີ່ໄດ້ສມັກໃຈເຂົ້າມາຊ່ວຍເຫລືອ. ຫາກບໍ່ມີບຸກຄົນເຫລົ່ານີ້ມາຊ່ວຍ ປຶ້ມຫົວນີ້ ຄືຈະບໍ່ເກີດ. ຂ້າພະ ເຈົ້າຍັງໂຊກດີ ທີ່ສາມາດເກັບກຳຂໍ້ຄວາມ ແລະ ຮູບພາບ ທີ່ຕ້ອງການນັ້ນ ມາລົງນຳ ເພາະຄົນລາວເຮົາ ໜ້ອຍຄົນທີ່ຈະມີໂອກາດ ເອົາເຄື່ອງສ່ວນຕົວດັ່ງນີ້ຕິດຕົວມານຳ ຕອນໄດ້ໜີອອກຈາກເມືອງລາວມາ ສ່ວນມາກກໍຈະແມ່ນແບບກະທັນຫັນທັງນັ້ນ. ປຶ້ມຫົວນີ້ ຄວນຈະມີລຽບລຽງກັນໂອ້ແຕ່ດົນແລ້ວ ຍອ້ນມາຈາກສະພາບ ການຫລາຍດ້ານຍັງບໍ່ພ້ອມ ຈິ່ງໄດ້ລໍມາເຖິງເທົ່າທຸກວັນນີ້. ຂ້າພະເຈົ້າຄິດວ່າ ວັນເວລາເທົ່າຈະເປັນຫລັກ ທີ່ຈະສແດງໃຫ້ເຫັນວ່າ ຜົນສະທ້ອນຂອງການປ່ຽນແປງໃນລາວ ຈະດີຫລືຮ້າຍໃຫ້ປະເທດຊາດບ້ານເມືອງຂອງເຮົາ. ຄວາມຕັ້ງໃຈຂອງຂ້າພະເຈົ້າ ບໍ່ແມ່ນແຕ່ຈະເອົາຄວາມບໍ່ດີບໍ່ງາມໃນອາດີດ ມາ ເວົ້າສູ່ກັນຟັງ ແຕ່ຍັງຢາກໃຊ້ເຫດຜົນເຫລົ່ານັ້ນ ມາຊ່ວຍທຳນາຍກັນວ່າ ການປ່ຽນແປງທີ່ອາດຈະ ເກີດຂຶ້ນໄດ້ໃນອານາຄົດຂ້າງໜ້າຢູ່ໃນລາວນັ້ນ ຈະເປັນແນວໃດສຳຫລັບອານາຄົດຄັ້ງໜ້າ..

ແຕ່ລະລຸ່ນແຕ່ລະສໄມ ຮອດຍາມແລ້ວກໍ່ຈະສິ້ນສຸດລົງໄປເອງ. ການເປັນຫົວເມືອງຂຶ້ນ ກໍຈົບລົງໄປ ພ້ອມກັບສົງຄາມໂລກຄັ້ງທີ່ສອງ ແລະ ລັດທິສັງຄົມນິຍົມແບບເກົ່າ ກໍຈົບລົງ ຫລັງຈາກສົງຄາມວຽດນາມ. ສຳລັບບ້ານເຮົາ ລະບົບໃໝ່ກໍ່ໄດ້ເລີ່ມຂຶ້ນມາແລ້ວ ພ້ອມກັນກັບຄົນລາວລຸ່ນໃໝ່ ທີ່ເກີດຢູ່ເມືອງລາວ ຫລື ຢູ່ຕ່າງປະເທດ ຫລັງຈາກປີ 1977 ມາ. ພວກໜູ່ມນ້ອຍລຸ່ນນີ້ ສລາດແລະປາກພະສາຕ່າງດ້າວ ໄດ້ ຫລາຍພະສາ. ເຂົາເຈົ້າມີຫວັງ ຮັບໜ້າທີ່ຄວບຄຸມເມືອງລາວ ໃຫ້ຢູ່ດີກິນດີ ແລະສງົບສຸກ ນຳເພື່ອນ ປະເທດໄກ້ຄຽງນຳກັນຢູ່ໃນເຂດເອເຊັຽ ຕະວັນອອກ ພາກໄຕ້ແລະພາກເໜືອ ພ້ອມທັງເປີດປະ ຕູຢ່າງ ກວ້າງຂວາງໃຫ້ນັກທອ່ງທ່ຽວຈາກທົ່ວໂລກ ເພື່ອເຂົ້າມາຢັ້ຽມຍາມເມືອງລາວໄດ້ຢ່າງສະບາຍ. ຄົນລາວລຸ່ນນີ້ ຈະມີໂອກາດ ຊີ້ນຳໃຫ້ພາປະເທດນ້ອຍຫລາຍປານໃດນັ້ນແທ້ ສ່ວນຫລາຍກໍຄືຈະຂຶ້ນ ກັບທ່າທີນະໂຍບາຍຂອງຈີນແຜ່ນດິນໃຫຍ່ ແລະ ສຫະຣັຖອາເມຣິກາ. ຊາວປະເທດເອເຊັຽທັງຫລາຍ ຕ້ອງການຣິ່ມໂພຣິ່ມໄຊ່ຍຂອງ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສອງປະເທດນີ້ ເພື່ອຮັກສາຄວາມສງົບ ສ້າງສັນຄວາມຮ່ວມໄມ້ຮ່ວມມືລະຫວ່າງຕ່າງປະເທດ ຢູ່ເປັນກອ້ນເປັນໜ່ວຍ ຢ່າງເປັນເອກຣາດເຕັມຕົວ. ພວກເຮົາຫວັງວ່າ ປະເທດລາວ ຈະຢູ່ແບບສງົບຜູກພັນໄມຕຣີກັບປະເທດອື່ນໆ ແລະ ກໍ່ຈະບໍ່ມີສົງຄາມ ແບບສົກອິນໂດຈີນ ນັ້ນເກີດຂຶ້ນອີກ ໃນລາວ, ຂແມນ ແລະ ຫວຽດນາມ. ເຖິງເວລາແລ້ວ ທີ່ຄວນຈະເປັນ ລະບົບແຫ່ງຄວາມສງົບສຸກ ແລະຈະເຣີນຮຸ່ງເຮືອງ ສໍາຫລັບປະຊາຊົນໃນແຫລມອິນໂດຈີນ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 1.

# ປະຫວັດເຫດການຕ່າງໆກ່ອນປີ 1954

ຝຣັ່ງໄດ້ເຂົ້າໄປເມືອງລາວ ໃນເດືອນພຶສຈິກາ (November) ວັນທີ່ 10, 1861. ໃນປີ 1872 ພວກ ໂຈຣ ຫໍ້ທຸງ "ແດງ; ທຸງລາຍ, ທຸງເຫລືອງ" ເຂົ້າໄປປົ້ນສະດົມເມືອງລາວທາງພາຄເໜືອ ຜູ້ນຳຝຣັ່ງເສສ ຈຶ່ງໄດ້ ຕິດຕໍ່ໃຫ້ຊຸມຊົນເຜົ່າມົ້ງ ໃຫ້ຊ່ວຍມົ້ງໄດ້ຊ່ວຍຝຣັ່ງເສສ ຢ່າງດີ ເຮັດໃຫ້ຝຣັ່ງເຊື່ອຖືເຜົ່າມົ້ງ. ໃນເດືອນ ພຶສ ພາ (May) 1893, ຝຣັ່ງໄດ້ໃຊ້ກຳລັງທະຫາຣຍຶດເມືອງລາວ ອອກຈາກການເປັນຫົວເມືອງຂຶ້ນຂອງໄທ໌ຍ ມາເປັນຫົວເມືອງຂຶ້ນເປັນຂອງຝຣັ່ງເສສ ແລະໄດ້ແຕ່ງຕັ້ງນາຍຈີງໄກມົວ ເປັນໄກຕົງ ປົກຄອງ ຊຸມຊົນ ເຜົ່າມົ້ງ ທີ່ໜອງແຮດ ແລ້ວຈຶ່ງແມ່ນ ໄກຕົງ ລໍ ເບລັ່ຍຢ້າວ ເປັນຜູ້ນຳຕໍ່ ໃນປີ 1913-1934. ຍ້ອນ ວ່າຝຣັ່ງ ໄດ້ກຳອຳນາຕຢູ່ໃນເມືອງລາວ ຈຶ່ງໄດ້ເລືອກເອົາ ຕູ້ບີ ລີຝຸງ ຂຶ້ນມາເປັນຜູ້ປົກຄອງເຜົ່າລາວສູງ ທີ່ໜອງ ແຮດ ຈົນເຖິງ ປີ 1945 ຍ້ອນໄດ້ເກີດເສິກເຢຣະມັນ, ເສິກຍີປຸ່ນ ແລະສົງຄາມວຽດນາມຝຣັ່ງ ຈຶ່ງໄດ້ເສັຍ ສົງຄາມ ແລ້ວໄດ້ຖອຍອອກຈາກອິນດູຈີນ ຕາມສັນຍາເຊັນທີ່ເຈນີວາ.

## ຂໍ້ບັນທຶກໂດຍທ່ານຕູ້ເລັ້ຍ ລີຝຸງ

ໃນວັນທີ່ 19 ເດືອນມີນາ 1994, ຢູ່ທີ່ປະເທສຝຣັ່ງເສສ, ທ່ານຕູ້ເລັ້ຍລີຝຸງ ໄດ້ຂຽນບັນທຶກການເຄື່ອນໄຫວ ຕ່າງໆໃນອາດີດຕະການ ກ່ຽວກັບຊຸມຊົນລາວເຜົ່າລາວສູງ "ມົ້ງ" ເພື່ອເປັນຄວາມຊົງຈຳຂອງເຫລົ່າ ອະນຸ ຊົນລູ້ນຫລັງ ດັ່ງຕໍ່ໄປນີ້. ໃນອາດີດຕະກາຣຂອງພຣະຣາຊອານາຈັກລາວ, ຊຸມຊົນເຜົ່າລາວສູງ "ມົ້ງ" ໄດ້ ເຂົ້າ ປະກອບສ່ວນຢູ່ໃນວົງຣາຊການ, ທະຫານ, ຕຳຣວຈ, ຊຶ່ງໃນໄລຍະນັ້ນ ພຣະຣາຊອານາຈັກລາວ ຍັງ ເປັນຫົວເມືອງຂຶ້ນຂອງປະເທສຝຣັ່ງເສສ. ໃນປີ 1945-1954, ໄດ້ເຂົ້າຮ່ວມມືກັບກອງທັພຝຣັ່ງເສສ ຕໍ່ສູ້ ສົງຄາມອິນດູຈີນ ຕ້ານວຽດມິນແລະລາວອິສສຣະ.

ໃນປີ 1959 -1973, ໄດ້ເຂົ້າຮ່ວມມືກັບກອງທັພພຣະຣາຊອານາຈັກລາວ ແລະ ສະຫະຣັຖອາເມຣິກາ ຕໍ່ສູ້ຄອມມຸຍນິສຕ໌ ຢູ່ຕາມເຂຕແດນພາຄເໜືອຂອງລາວ. ຫລັງຈາກມີການຕໍ່ສູ້ກັນ ຢູ່ຊາຍແດນຂອງທັງ ສອງປະເທສ ລະຫວ່າງສະຫາພາບໂຊວຽດແລະຈີນແດງ ສະຫາພາບໂຊວຽດໄດ້ຫູ້ນເທອາວຸດສົງຄາມ ອັນມະຫາສານ ໃຫ້ວຽດນາມເໜືອໃນປີ 1970. ຕັ້ງແຕ່ນັ້ນມາ ສະຫະຣັຖຈຶ່ງຈຳເປັນຕ້ອງປ່ຽນແຜນການ ສູ້ລົບຢູ່ໃນອິນດູຈີນ.

## ປະວັດສາຕ ຊຸມຊົນເຜົ່າລາວສູງ "ມົ້ງ"ແລະ ການເຄື່ອນໄຫວຕ່າງໆ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນລະຫວ່າງປີ 1750, ເຜົ່າລາວສູງ"ມົ້ງ" ໄດ້ອົບພະຍົບລົງມາຈາກປະເທສຈີນແຜ່ນດິນໃຫ່ຍ ມາຕັ້ງຖິ່ນຖານຢູ່ໃນພຣະຣາຊອາຈັກລາວ, ຕາມຊາຍແດນຈີນ-ລາວ ທີ່ເປັນປ່າດົງ, ຢູ່ຫ່າງໄກຈາກຕົວເມືອງ. ຢູ່ໃນເມືອງ ແມ່ນຊົນຊິນເຜົ່າລາວແລະຊາຕອື່ນເຂົ້າມາຕັ້ງຢູ່ກ່ອນ. ຍ້ອນຢ້ານກົວເຫຕການຕ່າງໆ ທີ່ຈະເກີດຂຶ້ນຄື: ຢ້ານຈີນໄລ່ຕາມ ຍ້ອນໜີສົງຄາມມາຈາກຈີນ; ຢ້ານຜູ້ເປັນເຈົ້າຂອງປະເທສລັງເກຂິ່ມເຫັງ ຫລືຖືກປູ້ນຈີ້ ເພາະບໍ່ທັນຮູ້ພາສາລາວ, ບໍ່ຮູ້ເຈົ້ານາຍດີ; ຢ້ານຜິດຮີດຄອງປະເພນີຕ່າງໆ, ຢ້ານຜີຮ້າຍຢູ່ ໃນເມືອງ ເພາະວ່າມີຫລາຍຄົນໄດ້ລົງໄປໃນເມືອງ ຫລັງຈາກທີ່ໄດ້ກັບມາເຖິງບ້ານ ກໍໄດ້ເຈັບໄຂ້ໄດ້ ປ່ວຍຈົນເຖິງເສັຍຊີວິດໄປ ເພາະການແຕກຕ່າງທາງອາກາສຣະຫວ່າງເທິງພູກັບໃນເມືອງ. ເທິງພູ ອາກາສເຢັນບໍ່ມີຍູງ ບໍ່ເຈັບໄຂ້ປ່າຍ້ອນຍູງກັດ.  ຢູ່ໃນເມືອງ ເປັນພື້ນທີ່ຕ່ຳ ອາກາສຮ້ອນ, ມີຍູງ, ມີເຫັດກັດ ມັກພາໃຫ້ເຈັບພຍາດໄຂ້ປ່າ.

ດ້ວຍເຫຕຜົນເຫລົ່ານີ້ ຈຶ່ງມີຈຳນວນນ້ອຍຄົນທີ່ສາມາຖເຂົ້າໄປຢູ່ໃນເມືອງໄດ້. ດັ່ງນີ້ ຊຸມຊົນເຜົ່າມົ້ງ ສ່ວນຫລາຍ ຈຶ່ງອາໄສຢູ່ພູຜ່າ ຫ່າງໄກຈາກຕົວເມືອງ ຄົນມົ້ງຈຶ່ງບໍ່ໄດ້ມີການຮ່ຳຮຽນສຶກສາ, ບໍ່ຮູ້ພາສາ ລາວ ແລະ ພາສາຝຣັ່ງເສສ. ໃນລະຍະນັ້ນ ຄົນລາວຜູ້ອາສັຍຢູ່ໃນເມືອງ ທີ່ມີຄວາມຮູ້ແລະປາກພາສາ ຝຣັ່ງເສສໄດ້ ເປັນຜູ້ຕາງໜ້າຣາຊການຝຣັ່ງເສສ ໄປພົບພໍ້ຊຸມຊົນເຜົ່າມົ້ງ ຢູ່ຕາມປ່າດົງພູເຂົາ ແລະ ໝູ່ບ້ານຕ່າງໆ ເພື່ອສຳຣວຈປະຊາກອຣ ແລ້ວທາງຣາຊການຂອງຝຣັ່ງເສສ ຈຶ່ງໄດ້ວາງກົດໝາຍເກັບ ສ່ວຍຂຶ້ນ. ການປົກຄອງຂອງຝຣັ່ງເສສ ກໍໄດ້ສ້າງບັນຫາເກີດຂຶ້ນກັບຊຸມຊົນເຜົ່າມົ້ງ ຍ້ອນການເກັບສ່ວຍ ນີ້. ໃນທີ່ສຸດກໍມີການຕໍ່ຕ້ານຂອງຊຸມຊົນເຜົ່າມົ້ງ ທີ່ຢູ່ຕາມເຂຕແດນຣະຫວ່າງແຂວງຫົວພັນແລະຊຽງ ຂວາງ ແມ່ນຢູ່ບໍຣິເວັນປາກຄາ ນຳພາໂດຍທ່ານປະໃຈ (Paj Cai Vwj ) ເພື່ອຕໍ່ສູ້ເຈົ້າໜ້າທີ່ຝຣັ່ງເສສ.
ໃນລະຍະກາຣຕໍ່ສູ້ນີ້, ຝຣັ່ງເສສໄດ້ລະດົມເອົາທະຫາຣວຽດນາມ ໄປປາບຊຸມຊົນເຜົ່າມົ້ງ ຢ່າງຮູນແຮງ ແລະປ່າເຖື່ອນທີ່ສຸດ ໃນປີ 1919-1921 ໂດຍສະເພາະ ແມ່ນໃນແຂວງຫົວພັນແລະຊຽງຂວາງ ປະໃຈຈຶ່ງຕ້ອງເສັຍໄຊ໌ຍໃຫ້ຝຣັ່ງເສສ ໃນປີ 1922.

ໃນຂນະທີ່ມີການສູ້ຮົບກັນລະຫວ່າງຝຣັ່ງເສສແລະຊຸມຊົນເຜົ່າມົ້ງນັ້ນ ຝ່າຍຣາຊການລາວ ເຂົ້າໄປຫຍັ້ງກ່ຽວບໍ່ໄດ້ ເພາະເມືອງລາວຢູ່ກ້ອງອຳນາດຝຣັ່ງ ຕ້ອງເຂົ້າຂ້າງຝຣັ່ງ ໂດຍສະເພາະຕອນ ຊຸມຊົນເຜົ່າມົ້ງ ບໍ່ຍອມເສັຍສ່ວຍ. ແຕ່ຊາວມົ້ງ ບໍ່ມີອາວຸດຕໍ່ສູ້ຝຣັ່ງເສສ ນອກຈາກປືນເພີງລ່າເນື້ອ ເຂົາເຈົ້າຈຶ່ງໄດ້ອາໄສອິຕິພົນເທວະດາຟ້າດິນຊ່ວຍປົກປ້ອງ ແລະສູ້ເປັນກູ່ມເປັນກ້ອນ ພ້ອມຄອບຄົວລູກເມັຍ ຄົນສ່ວນ ຫລາຍຈຶ່ງເອີ້ນການຕໍ່ສູ້ນີ້ວ່າ "ເສິກຜີບ້າ".


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ທ່ານຕູ້ເລັ້ຍ ລີຝຸງ ໄດ້ຂຽນຕໍ່ໄປອີກວ່າ:  ເຜົ່າມົ້ງທີ່ມີອາຍຸ 18 ປີ ຂຶ້ນໄປ ຕ້ອງເສັຍພາສີຜູ້ລະ 75 ບີ້ ຕໍ່ປີ; ແຕ່ເຈົ້າໜ້າທີ່ລາວ ຜູ້ໄປເກັບພາສີ ບໍ່ໄດ້ປະຕິບັດຕາມກົດລະບຽບຂອງການເສັຍສ່ວຍນັ້ນເລີຍ ຊ້ຳພັດເກັບເພີ້ມຂຶ້ນຕື່ມນຳຜູ້ເສັຍສ່ວຍ ຜູ້ລະ 12 ບີ້ ຮວມທັງໝົດເປັນ 87 ບີ້ ເງິນເກົ່າແກ່ຂອງລາວ. ໃນລະ ຍະນັ້ນ ຊຸມຊົນເຜົ່າມົ້ງຍັງທຸກຂ໌ຍາກ ບໍ່ມີລາຍໄດ້ ສ່ວນຫລາຍ ບໍ່ມີເງິນຈະຈ່າຍຄ່າເສັຍສ່ວຍ. ເພື່ອ ຫລີກເວັ້ນຈາກການຖືກຈັບກຸມໄປລົງໂທສ ບາງຄົນຈຳເປັນຕ້ອງຂາຍລູກຂອງຕົນ ເພື່ອເອົາເງິນໄປເສັຍ ສ່ວຍ. ດ້ວຍເຫຕດັ່ງກ່າວ ຈື່ງເກີດການຕໍ່ສູ້ຂຶ້ນຈາກປະຊາຊົນສ່ວນຫລາຍ. ຝຣັ່ງເສສບໍ່ໄດ້ຟັງເຫຕຜົລ ຈື່ງ ໄດ້ສົ່ງກຳລັງໄປປາບຢ່າງປ່າເຖື່ອນ ເຮັດໃຫ້ມີຄົນຕາຍເປັນຈຳນວນຫລາຍຄົນ ຜູ້ບໍ່ຕາຍ ກໍຖືກຈັບກຸມ ເອົາໄປຂັງຄຸກ ຫລືເອົາໄປປະຫາຣຊີວິດ ເປັນຈຳນວນຫລາຍຄົນ.

ຂ່າວນີ້ ໄດ້ດັງໄປເຖິງຊຸມຊົນເຜົ່າມົ້ງໃນປະເທສຈີນ ຈື່ງໄດ້ຂູ່ຈະສົ່ງກຳລັງໄປຊ່ວຍປ້ອງກັນຊຸມຊົນເຜົ່າມົ້ງໃນປະເທສລາວ. ຕໍ່ມາ ຄຸນພໍ່ຊາວິນາ (Pere Savina) ຈື່ງເປັນຜູ້ໄປຫ້າມປາມ ເຈົ້າໜ້າທີ່ຝຣັ່ງເສສ ໃຫ້ເຊົາເຂັ່ນຂ້າເຜົ່າມົ້ງ ແລະໃຫ້ຍຸຕິການກະທຳດັ່ງກ່າວນີ້ເສັຍ. ຄຸນພໍ່ຊາວິນາ ໄດ້ໄປຊ່ວຍຊີວິດ 100 ຄົນ ຊຶ່ງກຳລັງຖືກມັດລຽນຕິດກັນ ເພື່ອລໍຖ້າຄຳສັ່ງຍິງເປົ້າ ຢູ່ເດີ່ນສນາມຫລວງ ເມືອງຊຽງຂວາງ ຍ້ອນວ່າ ເປັນພວກຕ້ອງຫາກຸ່ມສຸດທ້າຍ. ຕໍ່ຈາກນັ້ນ ຄຸນພໍ່ຊາວິນາໄດ້ໄປກວດເບິ່ງຕາມເຂຕແຂວງ ທີ່ມີຊຸມຊົນເຜົ່າມົ້ງອາໄສຢູ່ແລະຖືກຈັບກຸມ, ເພື່ອຂໍໃຫ້ເຈົ້າໜ້າທີ່ຝຣັ່ງເສສ ໄດ້ປ່ອຍຕົວ ແລ້ວຮຽກຮອ້ງ ບໍ່ໃຫ້ເຈົ້າໜ້າທີ່ຝຣັ່ງເສສຈັບກຸມ ຫລືຂ້າຊາວເຜົ່າມົ້ງອີກ. ຕໍ່ຈາກນັ້ນມາ ການຕໍ່ສູ້ເພື່ອຄວາມເປັນທັມຂອງທ່ານປະໃຈ ກໍ່ໄດ້ສິ້ນສຸດລົງ.

ບໍ່ດົນ ໃນປີດຽວກັນປີ 1922, ທ່ານຊົ່ງເຢີ ລໍ (Soob Ntxawm Lauj) ຄົນມົ້ງລໍ ຢູ່ທີ່ເມືອງໜອງແຮດ ເປັນຜູ້ນຳພາ ການຕໍ່ສູ້ເພື່ອຄວາມເປັນທັມ ເພາະໃນລະຍະນັ້ນ ຝຣັ່ງເສສໄດ້ສ້າງຖນົນເລຂທີ່ 7 ຈາກບ້ານບານ ໄປຫາໜອງແຮດ ແລະຈາກໜອງແຮດ ໄປຫາເມືອງແສນ ໃນພາຄກາງຂອງປະເທສວຽດນາມ. ຝຣັ່ງເສສໄດ້ມອບອຳນາຈໃຫ້ທ່ານໄກຕົງ ລໍ ເປັ້ຍຢ້າວ ເກັບເກນຄົນງານມາສ້າງຖນົນ ແລະໄດ້ຕັ້ງຄ່າແຮງງານຂຸດດິນນື່ງແມຕຣ໌ມົນທົນ ແລະໃຫ້ເລີກລົງ ໃນຣາຄາ 20 ບີ້. ເຖິງຈະເລີກກວ່າເກົ່າ ຄ່າຈ້າງກໍຍັງເທົ່າເດີມ  ບໍ່ໄດ້ສົນໃຈ. ເມື່ອນາຍຈ້າງບໍ່ມີຄວາມຍຸຕິທັມແລ້ວ  ຄົນງານກໍລຸກຂຶ້ນຕໍ່ສູ້. ການຕໍ່ສູ້ດັ່ງກ່າວ ຫລາຍຄົນກໍເອີ້ນວ່າ: “ເສິກຜີບ້າໄດ້ເກີດຂຶ້ນອີກແລ້ວ.”

*[ທ່ານຊົ້ງເຢີ ລໍ ມີຫລານຊາຍຄົນນື່ງ, ຊື່ຊົ້ງໄທ ລໍ, ໄດ້ອົພະຍົບໄປ ຢູ່ສະຫາຣັຖ ຢູ່ຣັຖນອສໄຄໂຣໄລນາ (North Carolina). ໃນປີ 1960-1970 ຊົ້ງໄທ ລໍ ໄດ້ຮັບໃຊ້ເປັນທະຫາຣ ແຟກ (FAG) ຂອງສະຫາຣັຖ ຢູ່ພາຄ 2 ແມ່ນຜູ້ນັ່ງເບື້ອງຫລັງຂອງນັກບິນ ຂີ່ເຄື່ອງບິນນ້ອຍ ບິນເທິງອາກາສ ເພື່ອຊອກຄົ້ນຫາເປົ້າໝາຍຂອງສັດຕຣູຄອມມຸຍນິສຕ໌ ແລ້ວລາຍງານໃຫ້ຝ່າຍມິດ ຫລືເປັນຜູ້ແປພາສາໃຫ້ນັກບິນ ບອກເຄື່ອງບິນໂຈມຕີຈາກທາງອາກາສຊ່ວຍ. ຊົ້ງໄທ ໄດ້ຖືກປືນ ປ.ຕ.ອ. ຂອງສັດຕຣູໃນ ຂນະທີ່ເຄື່ອງບິນອອກ*


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

*ປະຕິບັດງານ. ລູກປືນຖືກທີ່ຫົວສາຫັສ, ແຕ່ໂຊກຍັງດີ ເພາະມີການປິ່ນປົວອັນທັນສະໄໝ ຂອງແພທຍ໌ ສະຫາຣັຖ. ເມື່ອຫາຍປ່ວຍແລ້ວ ຊົ້ງໄທລໍ ໄດ້ປ່ຽນໜ້າທີ່ການ ໄປເປັນຜູ້ຊ່ວຍເຫລືອຄອບຄົວຂອງທະຫານ ແລະປະຊາຊົນ ຢູ່ໃນເຂດທະຫານພາຄ 2. ມີຫລາຍ ຄົນຮູ້ ຊົ້ງໄທ ລໍ ດີ].*

ທ່ານຕູ້ເລັ້ຍບັນທຶກຕໍ່ໄປວ່າ: ຝຣັ່ງເສສໄດ້ແຕ່ງຕັ້ງທ່ານໄກຕົງ ລໍ ເບລັ່ຍຢ້າວ ເປັນຜູ້ນຳໃຫ້ຊົນໄກຕົງ ແຕ່ປີ 1913-1934 ແທນທ່ານນາຍຈິງໄກມົວ. ເມື່ອທ່ານລໍ ເບລັ່ຍຢ້າວ ໄດ້ເສັຍຊີວິດໄປແລ້ວ ລູກຊາຍຊື່ ນາຍຈິງຕູ ລໍ ຂຶ້ນແທນໄກຕົງ ລໍ ມີຕຳແໜ່ງປົກຄອງ ຊຸມຊົນເຜົ່າມົ້ງຕໍ່ໄປ. ຍຸຄຂອງນາຍຈິງຕູ ລໍ ໄດ້ມີເຫຕການເກີດຂຶ້ນຫລາຍຢ່າງ ກັບຄອບຄົວ ລີ. ຫລັງຈາກ ຈິງຕູ ລໍ ເສັຍຊີວິດແລ້ວ ກໍແມ່ນລູກຊາຍຊື່ນາຍ ເຍັ່ຍເຮີ ລໍ, ເປັນຜູ້ປົກຄອງຕໍ່. ເຍັ່ຍເຮີ ເສັຍຊີວິດແລ້ວ ກໍແມ່ນສອງອ້າຍນ້ອງຊື່ ນາຍເຍັ່ຍວື ລີ ແລະ ນາຍຢາລໍລີ ເປັນລູກຫລານຈຸ້ມເຈື້ອເສັ້ງ ລີ ທີ່ໄດ້ຮ່ວມມືກັບຝຣັ່ງເສສ ສູ້ຣົບກັບໂຈຮຫໍ້ ທີ່ໄດ້ ເຂົ້າມາປົ້ນສະດົມເມືອງລາວ ທາງພາຄເໜືອໃນສະໄໝ 1872, ທັງສອງຄົນນີ້ ໄດ້ສ້າງຊື່ສຽງດີ ໃຫ້ຊຸມຊົນ ເຜົ່າມົ້ງ ແລະ ຝຣັ່ງເສສ ໄດ້ເຮັດໃຫ້ຝຣັ່ງເສສເຊື່ອຖືເຜົ່າມົ້ງ. *(Kaitong ເປັນຕຳແໜ່ງ ໃນຣະບອບການ ປົກຄອງຂອງອານາມ ຄ້າຍກັນກັບຕຳແໜ່ງຕາແສງ ຂອງການຈັດຕັ້ງຂອງລາວ).* ຫລັງຈາກສອງອ້າຍນ້ອງ ເສັ້ງລີ ຈຶ່ງແມ່ນທ່ານ ລີຝູງ ເປັນຜູ້ນຳຕໍ່.

ສໄມທ່ານໄກຕົງ ເບລັ່ຍຢ້າວ ລໍ ເປັນຜູ້ນຳນັ້ນ ທ່ານລີຝູງໄດ້ເປັນສມຽນແລະເປັນລູກເຂີຍຂອງທ່ານ ໄກຕົງ ລໍເບລັ່ຍ ຢ້າວ. ທ່ານລີຝູງ ໄດ້ສ້າງຄຸນງານຄວາມດີໃຫ້ກັບຄອບຄົວລີ, ແລະຄອບຄົວອື່ນໆ, ທ່ານເປັນຄົນມີຄວາມຮູ້ ອ່ານແລະຂຽນພາສາລາວໄດ້ດີສົມຄວນ. ແຕ່ພັຣຍາຂອງທ່ານລີຝູງ ຜູ້ເປັນລູກສາວຂອງໄກຕົງ ລໍ ໄດ້ກິນຢາຂ້າຕົວຕາຍ, ໄກຕົງ ລໍ ຈຶ່ງມີຄວາມເສັຍໃຈ ໄດ້ຈັບເອົາຕົວທ່ານລີຝູງ ນຳໄປຄູມຂັງຄຸກຢູ່ທີ່ຊຽງຂວາງຫລາຍເດືອນ. ຍ້ອນສາເຫຕດັ່ງກ່າວ, ທ່ານລີຝູງຄິດວ່າຕົນເອງບໍ່ຮູ້ພາສາຝຣັ່ງ ແລະກໍຂຽນບໍ່ເປັນ ອ່ານບໍ່ອອກ ຈຶ່ງໄດ້ສົ່ງລູກຊາຍຂອງທ່ານ 4 ຄົນໄປຮຽນໜັງສືຄື: ທ່ານໜາວຈາວ; ທ່ານຕູ້ບີ; ທ່ານຕູ້ເລັ້ຍ ແລະ ທ່ານຕູເຢີ ໄປເຂົ້າໂຮງຮຽນຢູ່ເມືອງຊຽງຂວາງ. ຝ່າຍມົ້ງລໍ ກໍໄດ້ສົ່ງທ່ານລໍຝຸງ ໄປຮຽນເໝືອນກັນ ຮຽນຈົບຂັ້ນເປັນຄູສອນໜັງສື. ສຳຫລັບທ່ານໜາວຈາວນັ້ນ ຮຽນບໍ່ຈົບຈັກຢ່າງ ແລ້ວກໍ່ໄດ້ກັບບ້ານ.

ທ່ານຕູ້ເລັ້ຍຮຽນຈົບໂຮງຮຽນກົດໝາຍ ສອບເສັງອອກໄດ້ທີ່ 3 ໃນປີ 1941. ໃນຂນະທີ່ຍັງຮຽນຢູ່ນັ້ນ, ທ່ານໄດ້ມີຄວາມມັກຮັກກັບເຈົ້າຄຳແພງ ຜູ້ເປັນເຊື້ອເຈົ້າວັງໜ້າ ຫລວງພຣະບາງ, ຈຶ່ງໄດ້ແຕ່ງງານເອົາກັນ ມີລູກດ້ວຍກັນສາມຄົນ ເປັນຊາຍໝົດ. ຍ້ອນການຮຽນໄດ້ດີ ທ່ານຕູ້ເລັ້ຍຈຶ່ງຖືກສົ່ງໄປເປັນຂ້າຣາຊການຢູ່ຫໍສນາມຫລວງ ທີ່ຫລວງພຣະບາງ ໃນປີ 1941-1945.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com






_ຮູບທີ່ 1_. *ທ່ານເບລັ່ຍຢ້າວ ລໍ ຫລື ທ່ານ ໄກຕົງ ປົກຄອງ ໜອງແຮດໃນປີ 1913-1934. (Caitong ເປັນຕຳແໜ່ງໃນ ຣະບອບການປົກຄອງອານາມ ຄ້າຍກັນກັບຕາແສງຂອງລາວ)*

_ຮູບທີ່ 2_. *ຜູ້ຍິງເຜົ່າມົ້ງ ແລະ ເຄື່ອງນຸ່ງສມັຍປີ 1800.*

ໃນປີ 1946, ທ່ານຕູ້ເລັ້ຍໄດ້ກັບໄປຊຽງຂວາງ ເພື່ອຮ່ວມມືກັບພຣະຍາຕູ້ບີ ລີຟຸງ ນຳພາຊຸມຊົນເຜົ່າມົ້ງ ໃນແຂວງດັ່ງກ່າວ ເພື່ອປະກອບສ່ວນ ຮ່ວມກັບຝຣັ່ງເສສ ຕໍ່ສູ້ລາວອິສສຣະ ແລະວຽດມິນ ຜູ້ລຸກລານ ລາວ. ໃນປີ 1947, ທ່ານຕູ້ເລັ້ຍ ລີຟຸງ ໄດ້ຖືກຄັດເລືອກເປັນຜູ້ແທນຣາຊດອນແຂວງຊຽງຂວາງ ແລະໄດ້ ຍ້າຍໄປປະຈຳໜ້າທີ່ການ ຢູ່ນະຄອນວຽງຈັນທ໌ ຈົນເຖິງ ປີ 1954 ຈຶ່ງໄດ້ກັບມາພັກຜ່ອນຢູ່ຊຽງຂວາງ. ທ່ານຕູ້ ເລັ້ຍ ບັນທຶກຊີວະປວັດຂອງທ່ານດັ່ງນີ້: ໃນປີ 1941, ທ່ານໄດ້ເດີນທາງຈາກໜອງແຮດ ໄປ ຫາ ຊຽງຂວາງ, ເປັນຣະຍະທາງ 100 ກວ່າກິໂລແມຕຣ໌, ເພື່ອໄປພົບທ່ານດາວິດໂບລີເອີ (DavidBeaulieu, Commissaire du Government Francais) ຂ້າຫລວງຣັຖບາລຝຣັ່ງເສສ, ໄດ້ຮັບ ເຊີນໄປກິນເຂົ້າ ເຊົ້າຢູ່ທີ່ບ້ານພັກຂອງທ່ານດາວິດ ອັນມີອາຫາຣທີ່ແຊບນົວຫລາຍ. ຫລັງຈາກຮັບປະທານ ອາຫາຣລຽບ ຮ້ອຍແລ້ວ, ຜູ້ກວດຣາຊການຝຣັ່ງເສສໄດ້ຖາມຂ້າພະເຈົ້າວ່າ: “*ຕູ້ເລັ້ຍ! ໄດ້ຂ່າວວ່າເຈົ້າມາ ຊຽງຂວາງໃນ ຄັ້ງນີ້, ແມ່ນເພື່ອມາປຸກຣະດົມປະຊາຊົນເຜົ່າມົ້ງຕໍ່ຕ້ານຝຣັ່ງ, ແມ່ນບໍ?*” ແລ້ວຂ້າພະເຈົ້າຈຶ່ງ ໄດ້ຖາມຄືນ ວ່າ “*ທ່ານໄດ້ຂ່າວນີ້ມາຈາກໃສ?*” ຂ້າພະເຈົ້າຍັງໄດ້ເວົ້າຕື່ມອີກວ່າ: “*ຂ້າພະເຈົ້າພ້ອມແລ້ວ ຈະປະເຊີນ ໜ້າກັບຜູ້ໃຫ້ຂ່າວນີ້!*” ກອມມິສແສຣ໌ຝຣັ່ງເສສໄດ້ຖາມ ອີກວ່າ: “*ຕູ້ເລັ້ຍ ມາຊຽງຂວາງໃນຄັ້ງນີ້ ມີທຸລະ ຫັຽງ?*” ຂ້າພະເຈົ້າໄດ້ຕອບວ່າ: “*ຂ້າພະເຈົ້າມາຂໍໜັງ ສືອະນຸຍາດນຳທ່ານ ເພື່ອເດີນທາງໄປຢ້ຽມ ຢາມ ຍາຕພີ່ນ້ອງເຜົ່າມົ້ງ ທີ່ອາໄສຢູ່ຕາມຊາຍແດນລາວ-ວຽດນາມ.*” ຫລັງຈາກນັ້ນ, ທ່ານກອມມິສແສຣ໌ ຝຣັ່ງ ເສສໄດ້ບອກຂ້າພະເຈົ້າວ່າ: “*ມື້ອື່ນ ເຊີນທ່ານມາພົບ ຂ້າພະເຈົ້າຢູ່ຫອ້ງການ ເວລາເຊົ້າ ປະມານ 9:00 ໂມງ.*”




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມື່ອຂ້າພະເຈົ້າໄດ້ເຂົ້າໄປຫ້ອງການຂອງທ່ານກອມມິສແສຣ໌ຝຣັ່ງ ຕາມນັດໝາຍນັ້ນ, ໄດ້ເຫັນຫລາຍຄົນນັ່ງເຕັມຢູ່ພາຍໃນຫ້ອງການຂອງທ່ານ ເພື່ອຕຽມປະຊຸມ. ການປະຊຸມໃນຄັ້ງນັ້ນ, ໄດ້ມີການປ່ຽນແປງຫລາຍຢ່າງ ແລະໄດ້ເຮັດໃຫ້ຂ້າຣາຊການລາວ ຕົກໜ້າທີ່ ຫລື ຖືກຍົກຍ້າຍໄປຢູ່ແຂວງອື່ນ ຄື:

- ທ່ານພູມີ ວົງວິຈິດ, ເຈົ້າເມືອງຊຽງຂວາງ ໄດ້ຖືກຍົກຍ້າຍໄປເປັນເຈົ້າເມືອງວຽງຈັນ;
- ທ່ານບົວສີ ຫົວໜ້າສາລເມືອງຊຽງຂວາງ ໄດ້ຖືກຍົກຍ້າຍໄປເປັນຜູ້ຮອງເຈົ້າເມືອງຢູ່ແຂວງສວັນນະເຂດ;
- ທ້າວຈາມ ຫົວໜ້າສານເມືອງຄຳ ຖືກປົດອອກຈາກຣາຊການ ຍ້ອນເຫັນວ່າເປັນຄົນເຫັນແກ່ຕົວ, ໄດ້ໃຫ້ຜູ້ກ່ຽວໄປພັກເຊົາຢູ່ສວັນນະເຂດ ປາສະຈາກໜ້າທີ່ການງານ.

ທ່ານຕູ້ເລັ້ຍໄດ້ບັນທຶກເຫດການໃນສົງຄາມໂລກຄັ້ງທີ່ສອງ ແລະສົງຄາມຢູ່ສາມປະເທສໃນອິນດູຈີນ ດັ່ງຕໍ່ລົງໄປນີ້: ສົງຄາມໂລກຄັ້ງທີ່ສອງ ທີ່ມີເຢຣະມັນແລະອີຕາລີ ບຸກໂຈມຕີຫລາຍປະເທສໃນຢູໂຣບ ໂດຍສະເພາະແມ່ນປະເທສຝຣັ່ງເສສຖືກໂຈມຕີໜັກ ບ້ານເມືອງແຕກເພພັງ ປະຊາຊົນແຕກກະຈັດກະຈາຍໄປທົ່ວໂລກ ເຮັດໃຫ້ຝຣັ່ງເສສເກືອບຕັ້ງຕົວບໍ່ທັນ. ໃນເອເຊັຍ ຍີປູ່ນໄດ້ລຸກຂຶ້ນຕໍ່ສູ້ຂັບໄລ່ຕ່າງດ້າວຝ່າຍຕາວັນຕົກ ພ້ອມແຜນຍຶດອຳນາຈໃນເອເຊັຍ. ຍີ່ປູ່ນປຣາໄຊ້ຍສົງຄາມ ຈຶ່ງເປັນໂອກາສໃຫ້ຫລາຍປະເທສໃນເອເຊັຍ ກອບກູ້ເອກກະຣາຊຈາກຝ່າຍຕາວັນຕົກຄືນ.

ໃນປີ 1939-1954, ສາມປະເທສໃນອິນດູຈີນຂອງຝຣັ່ງເສສ ຄື: ຂເມຣ; ລາວ ແລະວຽດນາມ ໄດ້ລຸກຂຶ້ນຕໍ່ສູ້ຝຣັ່ງເສສ ເພື່ອໃຫ້ລຸດພົ້ນອອກຈາກການເປັນຫົວເມືອງຂຶ້ນ. ການຕໍ່ສູ້ດັ່ງກ່າວ ຝ່າຍຝຣັ່ງເສສພາຍໃຕ້ການບັງຄັບບັນຊາຂອງນາຍພົນເດີລາສເຕີຣ ເດີຕາສຊີ ຍີ (Gen. de Lattre de Tassigny) ໄດ້ຂໍໃຫ້ສະຫະຣັຖຊ່ວຍ ຈຶ່ງໄດ້ຕັ້ງຖານທັພໃສ່ດຽນບຽນຟູ ເພື່ອຈະໄດ້ໃຫ້ບົດຮຽນແກ່ທະຫາຣຄອມມຸຍນິສຕ໌ ແຕ່ສະຫະຣັຖບໍ່ໄດ້ສົນໃຈ ຝຣັ່ງເສສຈຶ່ງຕ້ອງເສັຍໄຊຍ໌ສົງຄາມດັ່ງກ່າວ ຍ້ອນສະຫະຣັຖໄດ້ຕົກລົງກັບໂຮຈິມິນ ໃຫ້ມີການເຈຣະຈາ ຢູ່ເຈນີວາປະເທສ ຊຸຍເຊີແລນ ແລະໄດ້ຕຽມໃສ່ວັນທີ່ 21 ເດືອນພຶດສພາ (May) ປີ 1954 ແຕ່ ໂລກ ຄ.ມ.ນ. ແລະໂຮຈິມິນຕ້ອງການໄຊ້ຍຊນະທາງທະຫາຣ ຈຶ່ງໄດ້ໂຈມ ຕີດຽນບຽນຟູ ໃຫ້ແຕກກ່ອນໃນວັນທີ່ 7 ເດືອນພຶດສພາ (May) ປີ 1954 ຝຣັ່ງເສສ ຈຶ່ງໄດ້ເສັຍສົງ ຄາມດັ່ງກ່າວ. ກາຣຕົກລົງເຊັນສັນຍາມອບເອກະຣາຊໃຫ້ສາມປະເທສໃນອິນດູຈີນ ໃນວັນທີ່ 20 ເດືອນ ກໍຣະກະດາ (July) ປີ 1954, ແທນທີ່ຈະເປັນວັນທີ່ 21 ເດືອນພຶສພາ (May) ປີ 1954, ສນັ້ນ ສະຫະຣັຖຈຶ່ງບໍ່ເຊັນສັນຍານັ້ນ ມີແຕ່ 13 ປະເທສຮ່ວມເຊັນສັນຍາ (ແທນທີ່ຈະຕ້ອງມີ 14 ປະເທສ ເຊັນ ຮ່ວມ).

ໃນຣະຫວ່າງ ປີ 1945-1954, ປະຊາຊົນເຜົ່າມົ້ງໄດ້ປະກອບສວ່ນກັບຝຣັ່ງເສສ ຕໍ່ສູ້ສົງຄາມ. ເມື່ອຝຣັ່ງຖອນອອກຈາກອິນດູຈີນແລ້ວ ປະຊາຊົນເຜົ່າມົ້ງຍັງຄົງດຳເນີນການຕໍ່ສູ້ວຽດມິນ ຢ່າງບໍ່ໄດ້ຢຸດຢັ້ງ, ເພາະບໍ່ມັກລັດທິ ກົດຂີ່ຂົ່ມເຫັງຂອງວຽດນາມ ແລະຕ້ອງປ້ອງກັນຮັກສາພູມີພາຄ ບ່ອນສ້າງສາທຳມາຫາກິນ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂອງປະຊາຊົນຊາວເຜົ່າມົ້ງ ຕລອດມາແຕ່ດຶກດຳບັນ ມາຫລາຍຮ້ອຍປີ ເພື່ອບໍ່ໃຫ້ກາຍເປັນບ່ອນ ລີ້ຊ່ອນ ຫລືຖານທັພຂອງວຽດມິນ ທີ່ບໍ່ຍອມໜີອອກຈາກພູຜາສູງເຫລົ່ານັ້ນ. ວຽດມິນຈະບໍ່ຍອມປ່ອຍໃຫ້ຜູ້ ທີ່ໄດ້ຮ່ວມຣົບກັບຝຣັ່ງເສສ ມີຊີວິດຢູ່ໃນບໍຣິເວນນັ້ນອີກຕໍ່ໄປ”.

ທ່ານຕູ້ເລັ້ຍ ບັນທຶກຊີວະປະວັຕຂອງ ຣ.ອ. ບີເຊີໂລ (Capt. Bichelot) ຫົວໜ້າຝຣັ່ງເສສ ຮ່ວມກັບ ເຈົ້າສາຍຄຳ ສຸທະກະກຸມາຣ ແລະພຣະຍາຕູ້ບີ ລີຟຸງ ເປັນຄນະຜູ້ນຳ ເລີ່ມຕໍ່ສູ້ລາວອິສສຣະແລະວຽດມິນ ເພື່ອປົດປ່ອຍເອົາຕົວເມືອງຊຽງຂວາງ, ແຕ່ເຊົ້າວັນທີ່ 25 ເດືອນມະກະ ຣາ (January) ປີ 1946 ຈົນເຖິງ ວັນທີ່ 26, 1946 ຕອນແລງ. ຄນະຜູ້ນຳຕຽມຈະຖອນອອກ ຍ້ອນວ່າສະບຽນອາຫາຣກໍຈະໝົດ ທະ ຫາຣມົ້ງທີ່ເຂົ້າໄປປົດປ່ອຍຊຽງຂວາງ ກໍໃຊ້ແຕ່ປືນເພີງເປັນອາວຸທ ຕໍ່ສູ້ຍິງໄກບໍ່ໄດ້ຜົລ ຈຶ່ງໄດ້ສັ່ງໃຫ້ຖອຍ ໃນຕອນແລງ ວັນທີ່ 26 ເດືອນມະກະຣາ.

ແຕ່ທັນໃດນັ້ນ ທ່ານໄຊປາວ ວ່າງ ຫົວໜ້າຜູ້ນຳພາກຳລັງຊາວມົ້ງ ທີ່ມາຈາກເມືອງຜາແລະນາວັງ ປະມານ 300 ຄົນ ໄດ້ຕອບວ່າບໍ່ຕ້ອງຖອຍ, ຖ້າພວກເຮົາຖອຍໄປແລ້ວ ຈະກັບຄືນມາຍຶດເອົາຫົວພູຢູ່ອອ້ມ ແອ້ມຊຽງຂວາງແບບນີ້ ມັນບໍ່ແມ່ນຂອງງ່າຍ ຕ້ອງສູ້ໄປໃຫ້ເຖິງວັນທີ່ 27 ມະກະຣາ 1946 ເສັຍກ່ອນ. ພໍຮຸ່ງເຊົ້າຂອງວັນທີ່ 27 ເດືອນມະກະຣາ 1946 ສຽງປືນໄດ້ງຽບສະງົບລົງ, ຄນະຜູ້ນຳຈຶ່ງໄດ້ສົ່ງຄົນໄປ ກວດເບິ່ງ, ແລ້ວໄດ້ກັບມາລາຍງານວ່າ ແກວວຽດມິນແລະລາວອິສສຣະ ໄດ້ໜີໄປໝົດ ບໍ່ມີເຫລືອ ຢູ່ອີກແລ້ວ, ຈຶ່ງໄດ້ພາກັນເຄື່ອນກຳລັງເຂົ້າໄປເຖິງຕົວເມືອງຊຽງຂວາງ ແລະຍຶດເອົາຕົວເມືອງຊຽງຂວາງ ເປັນທີ່ຕັ້ງກອງບັນຊາການຂອງຝຣັ່ງເສສ ປະສົມລາວແລະມົ້ງ.

ທ່ານໄຊປາວວ່າງ ເວົ້າວ່າ ຫລັງຈາກນັ້ນມາ ເພິ່ນສເນີທັຽງ ແມ່ນພຣະຍາຕູ້ບີ ລີຟຸງ ຮັບເຊື່ອຟັງ ຄວາມຄິດເຫັນຂອງທ່ານໄຊປາວ ວ່າງ ສເນີ. ໃນເວລາເຂົ້າໄປປົດປ່ອຍພຣະເຈົ້າມະຫາຊີວິດ ສີສຫວ່າງວົງສ໌ ທີ່ຫລວງພຣະບາງໃນປີ 1946 ຄນະຜູ້ນຳການຕໍ່ສູ້ລາວອິສສຣະ, ເພື່ອຄວາມປອດໄພ໌, ໄດ້ເລືອກໄຊປາວ ວ່າງ ມານຸ່ງເຄື່ອງຊຸດພຣະຣາຊາ ຄືເຈົ້າຊີວິດ ເພື່ອໄປແຫ່ຄະບວນ ເປັນຕົວຫຸ່ນ ວ່າພຣະເຈົ້າມະຫາຊີວິດຖືກປົດປ່ອຍອອກແລ້ວ ໃຫ້ປະຊາຊົນໃນເມືອງຫລວງພຣະບາງຄຳນັບ.

*[ນັກຕໍ່ສູ້ທີ່ໄດ້ໄປປົດປ່ອຍເມືອງຊຽງຂວາງແລະຫລວງພຣະບາງລຸ້ນນັ້ນ ເກືອບວ່າຍັງມີຊີວິດຢູ່ ພຽງຄົນດຽວ ຄື ທ່ານໄຊປາວ ວ່າງ ຊຶ່ງໃນປີ 2011 ນີ້ ຢູ່ຣັດຢອກເຢັຍ ສະຫະຣັຖອາເມຣິກາ. ທ່ານເກີດວັນທີ່ 5 ພຶດສພາ 1919 ທີ່ ຊຽງຂວາງ ຣາຊອານາຈັກລາວ ແຕ່ປັດຈຸບັນນີ້ ທ່ານກໍ່ໄດ້ເສັຍຊີວິດແລ້ວໃນວັນທີ່ 15 ເດືອນພຶດສພາ 2011].*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເດືອນກູມພາ (February) ປີ 1945, ຜູ້ນຳລາວອິສສຣະ ເຈົ້າເພຊຣາຊ ໄດ້ສົ່ງທ່ານພູມີ ວົງວິຈິດ ເຈົ້າເມືອງຊັ້ນ 5 ໄປວ່າຣາຊການແທນເຈົ້າແຂວງຫົວພັນ ຊື່ທ້າວເຫລັກ ແສງສະຖິດ ຊຶ່ງມີນາມມະຍົດ ວ່າ ພຣະຍາເມືອງຂວາ *(ແມ່ນພໍ່ເມັຍຂອງພຣະຍາພູມີ ວົງວິຈິດ).* ເຈົ້າເພຊຣາຊໄດ້ສັ່ງທ້າວເຫລັກໃຫ້ໄປ ປົດປ່ອຍເອົາເມືອງຊຽງຂວາງ ພ້ອມທັງໃຫ້ໄປເປັນເຈົ້າແຂວງຢູ່ແຂວງຊຽງຂວາງ. ທ້າວເຫລັກ ແລະພັນ ເອກ ສິງ ຣັຕນະສະໄມ, ນາຍທະຫາຣລາວອິສສຣະ, ໄດ້ນຳທະຫາຣແກວ ແລະກຳລັງລາວອິສສຣະ ເຂົ້າ ຕີ ຍຶດເອົາເມືອງຊຽງຂວາງຈາກຝຣັ່ງເສສ ໃນວັນທີ່ 28 ເດືອນ ພຶສຈິກາ (November) ປີ 1945. ບໍ່ທັນຮອດສອງເດືອນ, ທ່ານເຈົ້າແຂວງສາຍຄຳ ສຸທະກະກຸມາຣ, ແລະພະຍາຕູບີ ລີຟຸງ ໄດ້ນຳກຳ ລັງທະ ຫານມົ້ງໄປຍຶດເອົາຄືນໄດ້ ຈຶ່ງເຮັດໃຫ້ຝ່າຍລາວອິສສຣະ ອັນມີເຈົ້າເພັຊຣາຊ, ເຈົ້າສຸວັນນາພູມາ ແລະ ເຈົ້າສຸພານຸວົງສ໌ ບໍ່ພໍໃຈໃນການສູ້ຮົບດັ່ງກ່າວ. ຝ່າຍສະນັບສນູນຝຣັ່ງເສສໄດ້ຈັບເຈົ້າແຂວງ ພຣະຍາ ເມືອງຂວາ ໄປປະຫາຣຊີວິດຢູ່ເມືອງຊຽງຂວາງ ຈຶ່ງເຮັດໃຫ້ພຣະຍາພູມີ ວົງວິຈິດ ຕັດສິນໃຈເຂົ້າຮ່ວມ ວຽດມິນ ຕໍ່ສູ້ຝຣັ່ງເສສແລະຝ່າຍຣັຖບາລຣາຊອານາຈັກລາວ.

ໃນສໄມສົງຄາມໂລກຄັ້ງທີ່ສອງໄດ້ລະເບີດຂຶ້ນ, ກອງທະຫາຣຍີປຸ່ນໄດ້ເຂົ້າຍຶດຄອງປະເທສລາວ ໃນວັນທີ່ 9 ເດືອນມີນາ (March) ປີ 1945. ຍີປຸ່ນ; ລາວອິສສຣະປະສົມວຽດມິນ ໄດ້ເຄື່ອນໄຫວທຳການສູ້ຮົບ ກັບ ຝຣັ່ງເສສ ເພື່ອກອບກູ້ເອົາເອກກະຣາຊ. ທ່ານຕູ້ບີ ລີຟຸງ ຮ່ວມງານກັບຝຣັ່ງເສສ ຈຶ່ງໄດ້ເລື່ອນຊັ້ນ ຂຶ້ນເປັນ ນາຍກອງຊັ້ນ 4 ໃນວັນທີ່ 28 ສິງຫາ 1946, ເປັນອຸປະຣາຊຊັ້ນ 1 ໃນເດືອນກໍ ຣະກະດາ (July) ປີ1947, ແລະເປັນເຈົ້າເມືອງຊັ້ນ 4 ໃນລາຍະຕໍ່ມາ. ຜູ້ນຳຊຸມຊົນເຜົ່າລາວແລະເຜົ່າມົ້ງ ຮ່ວມກັບຝຣັ່ງ ຕໍ່ສູ້ ຢູ່ແຂວງ ຫົວພັນ (ຊຳເໜືອ) ແລະຊຽງຂວາງ ໃນປີ 1946 ແມ່ນທ່ານຕູ້ບີ ລີຟຸງ ແລະ ທ່ານຈິງຕົວ ມົວ ຮ່ວມກັບ ເຈົ້າສາຍຄຳສຸທະກະກຸມາຣ ເຂົ້າປະກອບສ່ວນໃນການຕໍ່ສູ້ລາວອິສຣະ ໃນສໄມເປັນຫົວເມືອງ ຂຶ້ນຂອງ ຝຣັ່ງເສສ.

ໃນວັນທີ່ 1 ເດືອນພຶສຈິກາ (November) 1949, ທ່ານຕູ້ບີ ລີຟຸງ ໄດ້ຮັບຕຳແໜ່ງເຈົ້າແຂວງຮອງ ພະແນກປົກຄອງຊຸມຊົນເຜົ່າມົ້ງໃນແຂວງຊຽງຂວາງ ແລ້ວຕໍ່ມາ ກໍ່ໄດ້ຮັບພຣະຣາຊທານ ນາມຍົສຊຸນນາງ ຊັ້ນພຣະຍາ ຈາກພຣະບາທສົມເດັຈພຣະເຈົ້າມະຫາຊີວິຕສີສຫວ່າງວົງສ໌ ໃຫ້ເປັນພຣະຍາ ດຳຣົງ ຣິທິໄກ *(ແປວ່າ: ພຣະຍາ ຜູ້ຮັກສາໄວ້ຊຶ່ງຣິທເດຊ ແລະອຳນາຈ ອັນສັກດິ໌ສິທທີ່ສູງສົ່ງ).* ນອກນັ້ນ ທ່ານຕູ້ບີ ລີຟຸງ ກໍ່ໄດ້ຮັບຫລຽນອິສຣິຍາພອຣພິເສສ ຫລາຍອັນຈາກຝຣັ່ງເສສ ແລະພຣະຣາຊອານາຈັກລາວ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 3. ແມ່ນ ທ່ານ ລີຟູງ ເປັນຜູ້ນຳຊຸມຊົນເຜົ່າມົ້ງໃນສມັຍ ປີ 1932-1939 ແລະ ຄອບຄົວຂອງທ່ານ. ທ່ານລີຟູງ ເກີດ 1888 ເສັຍຊີວິດໃນວັນທີ່ 12 ເດືອນທັນວາ ປີ 1939 ເປັນລູກຊາຍຂອງ ທ່ານ ລີປາວ ຫລື ລີດາງປາວ. ແຖວໜ້າຈາກຊ້າຍ ຫາ ຂວາ:1- ຕຸບີ (ລູກຄົນທີ່ 3) 2- ຕຸເຢີ (ລູກຄົນທີ່ 4); 3- ຕຸເລັ້ຍ (ລູກຄົນທີ່ 5); 4-ທ່ານລີຟູງ ຫົວໜ້າຄອບຄົວ; 5-ລູກສາວຈັບ ຫົວເຂົ່າຂອງພໍ່ ຊື່ ນາງເບົ້າ (ຕໍ່ມາໄດ້ເປັນພັລະຍາຂອງ ຕຸລີ ວ່າງ ຫລື ໝາວຕູ້ ວ່າງ ແມ່ນອ້າຍຂອງນາຍພົລ ວ່າງປາວ. ຕຸລີ ໄດ້ ເສັຍຊີວິດ ຍ້ອນອຸປະຕິເຫຕ ລົດຂ້ວມ. ນາງເບົ້າໄດ້ແຕ່ງງານໃໝ່ກັບທ່ານ ພ.ອ ມົວສື ນາງໄດ້ເສັຍຊີວິດ ທີ່ສະຫາຣັຖ ໃນ ປີ 2006); 6- ພັລະຍາຄົນທີ່ສາມ ຂອງທ່ານ ລີຟູງ ຊື່ນາງກີຈົວ (ກຳລັງອູ້ມລູກສາວ ຊື່ນາງຈູໄດ້ເສັຍຊີວິດ 1928); 7-ລູກສາວ ທ່ານລີຟູງ ຊື່ ນາງເມົາຊົງ (ນາງໄດ້ແຕ່ງງານກັບ ກ່າເຢ້ວ່າງ ນາງມູ່ງຊື້ນສີຂາວເສັຍຊີວິດໄນສະຫາຣັຖ ປີ 2007). ແຖວຫລັງ ຊ້າຍຫາຂວາ 1-ລີເຈົາ (ລູຊາຍກົກທ່ານລີຟູ); 2-ຢາງຕົງເຊັ້ງ (ນ້ອງເຂີຍ); 3-ລີເປົ້າເຢ້ (ລູກຊາຍຄົນທີ່ສອງຂອງທ່ານລີຟຸງ ໄດ້ເປັນ ຕາແສງ ໄດ້ເສັຍຊີວິດຍ້ອນຕົກມ້າ ທ່ານ ຕູ້ບີ ຈຶ່ງໄດ້ເອົາ ເອື້ອຍ ໄພ້ເປັນເມັຍຄົນທີ່ສອງ); 4- ພັນລະຍາຂອງລີ ຈາວຊື່ ເປັ້ຍທ່າວ; 5 ເມັຍກົກທ່ານ ລີຟູງ ຊື່ຢາງວ້າ (ນາງໄດ້ເສັຍຊີວິດໃນປີ 1945); 6- ຄົນສຸດທ້າຍ ຊື່ນາງເມົາ ຫລື ບໍ້ຢົວ ເມັຍ ຢາງ ຕົງເຊັ້ງ. [ຮູບນີ້ແມ່ນ ສເດັຈເຈົ້າເພັຊຣາຊ ທຣົງ ຖ່າຍໄວ້ຍາມໄດ້ໄປຢ້ຽມຢາມຊາວຊຽງຂວາງ ໃນປີ 1927-1928].*

ໃນປີ 1939 ສົງຄາມໂລກຄັ້ງທີ່ 2 ໄດ້ລະເບີດຢູ່ປະເທສຝຣັ່ງເສສແລະທວີບຢຸໂຣບ. ຝຣັ່ງເສສໄດ້ຮັບການ ເສັຍຫາຍໜັກ ຈຶ່ງເປັນຝ່າຍເສັຍປຽບ. ທະຫາຣຝຣັ່ງໃນອິນດູຈີນໝົດຫົນທາງສູ້ກັບຍີປຸ່ນ, ຫລາຍຄົນໄດ້ ຖືກຈັບເປັນສະເລີຍເສິກ, ຫລາຍຄົນຖືກຂ້າ ສ່ວນໜຶ່ງທີ່ເຫລືອ ໄດ້ໄປອາສັຍລີ້ຊ່ອນຢູ່ນຳປະຊາຊົນ ຜູ້ທີ່ ມີຄວາມຈົງຮັກພັຄດີ ໄດ້ນຳເອົາໄປຊຸກເຊື່ອງໄວ້ຕາມປ່າຕາມດົງ ໂດຽສະເພາະແມ່ນປະຊາຊົນລາວ ລຸ່ມ ແລະ ຊາວລາວເຜົ່າມົ້ງ. ໃນຣະຍະສົງຄາມດັ່ງກ່າວ, ຄອບຄົວ ລໍ ໄກຕົງ ໄດ້ຫັນໄປເຂົ້າ ສນັບສນຸນ ກອງ ທັພຍີປຸ່ນ, ວຽດມິນແລະລາວອິສສຣະ ເພື່ອຕໍ່ສູ້ກັບກອງທະຫາຣຂອງຝຣັ່ງເສສ ໂດຽອ້າງວ່າປົດແອກ ອອກຈາກການເປັນຫົວເມືອງຂຶ້ນຂອງປະເທສຝຣັ່ງເສສ, ແຕ່ຫາກຕົກເປັນເຄື່ອງມືຂອງວຽດມິນ ທີ່ຍົວະ




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃຊ້ເທົ່ານັ້ນ. ເຫຕຜົລອັນແທ້ຈິງຂອງການຕໍ່ສູ້ຂອງຄອບຄົວລໍ ໄກຕົງ ແມ່ນ "ຍ້ອນວ່າຝຣັ່ງໄດ້ເລືອກ ເອົາ ລີຟຸງ ມາເປັນຜູ້ປົກຄອງເຜົ່າມົ້ງ ໃນບໍຣິເວັນໜອງແຮດ ແທນຄອບຄົວ ລໍ ຊຶ່ງໄດ້ເຮັດຫລາຍ ຢ່າງບໍ ຊອບ ທັມ". ການຕໍ່ສູ້ ແມ່ນເພື່ອກູ້ກຽຕຂອງຕົນເທົ່ານັ້ນ ແຕ່ໂຊຄບໍ່ເຂົ້າຂ້າງ ເລີຍກາຍເປັນລູກນ້ອງຂອງ ແກວ ໂດຽປະຣິຍາຍ.



*<u>ຮູບທີ່ 4</u>. ຮູບພັລລະຍາທ່ານລີຟູງ ແມ່ຂອງທ່ານພຍາ ຕູ້ບີ ລີຟູງ (ຜູ້ຢູ່ຊ້າຍສຸດ ຈັບຫົວເດັກນ້ອຍ) ຖ່າຍນຳນ້ອງສາວສາມຄົນ ໃນປີ 1923*



*<u>ຮູບທີ່ 5</u>. ທ່ານບີຈູ ລໍຕອນເຂົ້າຮ່ວມຕໍ່ສູ້ ລາວອິສສຣະແລະ ວຽດມິນຮ່ວມກັບ ພະຍາຕູ້ບີລີຟຸງ ໃນສໄມປີ 1945 ຫາ 1949*



*<u>ຮູບທີ່ 6.</u> ທ່ານ ປະຈ້າລີ ຜູ້ນຳທີ່ຮວ່ມກັບທ່ານຕຸ້ເລັ້ຍ ລີຟຸງ ໄປເກັບເກັນປະຊາຊົນເຜົ່າມົ້ງ ໃນເຂຕເມືອງຜາ ແລະ ພູຜາໄຊ ໄປປົດປ່ອຍເມືອງຊຽງຂວາງໃນວັນທີ່ 27 ເດືອນ ມັງກອນ 1946*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 7</u>. ເຈົ້າ ຄຳພັ້ນ ວົງກົດຣັຕະນະ ແລະ ລູກສາວຄົນທີ່ສາມ ໄດ້ໄປຢ້ຽມຢາມຊຽງຂວາງແຕ່ເດືອນ 2/25 ຫາເດືອນ 7/03/51 ຈາກຊ້າຍຫາຂວາ 1.ພຍາ ດຳຣົງ ຣິທທິໄກ ຕູ້ບີລີຟຸງ ; 2. ຕູເຢີ ລີຟຸງ; 3. ເຈົ້າຄຳພັ້ນ ວົງກົຕຣັຕນະ (ເກີດວັນທີ 7 ພຶດສພາ (May) 1889 ທີ່ຫລວງພະບາງ ເສັຍຊີວິດດ້ວຍໂຣຄຊະຣາ ວັນທີ່ 22 ມະກະຣາ (January) 1972 ທີ່ຫລວງພະບາງ, ປະເທສລາວ ເປັນບຸຕຊາຍກົກຂອງ ເຈົ້າວົງກົຕ ແລະ ເຈົ້າຍິງຣັຕນະວະດີ); 4. ເຈົ້າຄຳຜຸຍ ວົງກົຕ (ເກີດວັນທີ່ 10 ກໍຣະກະດາ (July) 1923 ທີ່ຫລວງພະບາງ ເສັຍຊີວິດດວ້ຍໂຣຄຊະຣາ ວັນທີ່ 17 ທັນວາ (December) 2002 ທີ່ Clermont-Ferrand, France ຕອນອາຍຸ 79 ປີ. ໃນປີ 1973 ໄດ້ຮັບຊັ້ນເປັນ ນາຍພັນໂທ ດ້ານພະແນກ ສວັສດີການ ຂອງກອງທັພພຣະ ຣາຊອານາຈັກລາວ); 5. ທ່ານ ຕູ້ເລັ້ຍ ລີຟຸງ (ເກີດວັນທີ່ 14 ມີນາ (March) 1922 ທີ່ຊຽງຂວາງ ເສັຍຊີວິດດ້ວຍໂຣຄຊະຣາ ວັນທີ່ 5 ຕຸລາ (October) 1996 ທີ່ປະເທສຝລັ່ງເສສ Aulnau-Sous-Bois, France ຕອນອາຍຸ 74 ປີ. ເຄີຍເປັນຜູ້ແທນຣາຊດອນ ແຂວງຊຽງຂວາງ 1947-1950 ເປັນຜູ້ວາງຮ່າງກົດໝາຍເຖິງ 1975). ຮູບຖ່າຍວັນທີ່ 27 ເດືອນກຸມພາ (February) ປີ 1951.*

ໃນປີ 1945-1946, ສະພາບການໄດ້ປ່ຽນແປງຍ້ອນສົງຄາມຍີປຸ່ນ, ຄອບຄົວລີຟຸງ ຜູ້ເຄີຍຮ່ວມມືກັບຝຣັ່ງເສສ ຈຳເປັນຕ້ອງໄດ້ໜີເຂົ້າໄປລີ້ຊ່ອນຢູ່ປ່າດົງນຳທະຫານຂອງຝຣັ່ງເສສ ເພື່ອເອົາຕົວລອດ ເພາະຖືກໄລ່ລ່າຈາກລາວອິສສຣະ, ມົ້ງລໍ ວຽດມິນ ແລະຍີປຸ່ນ ຢູ່ທຸກແຫ່ງ.

ສມັຍສົງຄາມໂລກຄັ້ງທີ່ 2 ທ່ານນາຍພົນຕຣີ ວ່າງປາວ ຍັງເປັນວັຍຣຸ່ນ ອາຍຸປະມານ 14 ຫລື 15 ປີ, ທ່ານໄດ້ມາຮັບໃຊ້ເປັນຄົນເກັບຂ່າວ, ສົ່ງຂ່າວສົ່ງຈົດໝາຍ ໃຫ້ພຣະຍາຕູ້ບີ ລີຟຸງ, ເຈົ້າແຂວງ ສາຍຄຳ ສຸທະກະກຸມາຣ, ແລະ ຝຣັ່ງເສສ ຢູ່ຕາມຈຸດຕ່າງໆ ໃນເຂຕບໍຣິເວນໜອງແຮດແລະຊຽງຂວາງ. ທ່ານໄດ້ປະຕິບັດໜ້າທີ່ດີເດັ່ນ. ໃນທີ່ສຸດ ທ່ານໄດ້ມາເປັນຜູ້ຮັບໃຊ້ຝຣັ່ງຢ່າງເປັນທີ່ເຊື່ອຖືໄດ້. ເມື່ອອາຍຸເຖິງກະສຽນແລ້ວ ຝຣັ່ງໄດ້ຮັບບັນຈຸທ່ານເຂົ້າຮັບໃຊ້ຣາຊການທະຫານຂອງຝຣັ່ງເສສ. ໃນປີ 1951 ທ່ານ ໄດ້



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄປເຂົ້າໂຮງຮຽນນາຍຮ້ອຍຢູ່ດົງເຫັນ. ເມື່ອຮຽນຈົບຈາກໂຮງຮຽນນາຍຮ້ອຍທະຫານບົກ ທີ່ດົງເຫັນ ແລ້ວທ່ານໄດ້ຊັ້ນວາທີ່ຮ້ອຍຕຣີ. ທ່ານເປັນນັກຮຽນທີ່ມີຣະບຽບວິນັຍດີ ມີຄວາມສລາດໃນການວາງ ແຜນສູ້ຮົບກັບສັດຕູ, ຍິງປືນແມ້ນ ຖືກເປົ້າໝາຍດີ ແລະມີສຸຂພາບເຂັ້ມແຂງ ແລ່ນໄວ ຈົນສາມາດ ສອບເສັງຜ່ານໂຮງຮຽນນາຍຮ້ອຍໄດ້ ເປັນຮູ່ນດຽວກັນກັບທ່ານພັນເອກກຳກາ ພົມໂສພາ ປະຈຸບັນຢູ່ນອສ ໄຄໂຣໄລນາ (North-Carolina).

ໃນວັນທີ່ 9 ເດືອນມີນາ (March) ປີ 1945,  ຍີປຸ່ນເຂົ້າຍຶດເມືອງລາວ.  ລູກຣະເບີດປຣາມານູລູກທີ່ໜຶ່ງຂອງສະຫະຣັຖ ຕົກໃສ່ເມືອງຮີໂຣຊິມາ ປະເທສຍີປຸ່ນ ໃນວັນທີ່ 6, ເດືອນສິງຫາ (August) ປີ 1945, ຣະເບີດປຣາມານູລູກທີ່ສອງຂອງສະຫະຣັຖ ຕົກໃສ່ເມືອງນາກາຊາກີ ໃນວັນທີ່ 9 ເດືອນສິງຫາ (August) ປີ 1945. *(ຢູ່ປະເທສຍີປຸ່ນ ແມ່ນວັນທີ່ 7 ແລະ10).*
ໃນວັນທີ່ 14 ເດືອນສິງຫາ (August) ປີ 1945 (ແມ່ນວັນທີ່ 15 ຢູ່ຍີປຸ່ນ), ຍີປຸ່ນໄດ້ປະກາສຍອມຈຳນົນຕໍ່ສະຫະຣັຖ ແລະພັນທະມິຕ. ຍີປຸ່ນໄດ້ຖອນກອງທັພຂອງຕົນອອກຈາກອິນດູຈີນຢ່າງປຣາໄຊ໌ຍ, ໄດ້ວາງອາວຸທແລະເຄື່ອງອຸປະກອນສົງຄາມ ໄວ້ໃຫ້ວຽດມິນ, ລາວອິສສຣະແລະໄທຍ໌ ເພື່ອດຳເນີນການຕໍ່ສູ້ກູ້ຊາຕຈາກຝຣັ່ງເສສແລະອັງກິສ ທີ່ເຄີຍໄດ້ຄອບຄອງເຫລົ່າປະເທສໃນເອເຊັຍ ມາແຕ່ດົນນານ. ອາວຸທອີກຈຳນວນໜຶ່ງ ຍີປຸ່ນໄດ້ມອບໃຫ້ຈີນຄນະຊາຕ (ກົວມິ້ນຕັງ) ທີ່ສິ່ງກອງພົລທີ່ 913 ຈາກຢຸນນານ ລົງມາປົດອາວຸທ ເກັບເອົາໄປມ້ຽນໄວ້. ເມື່ອມີອາວຸດຢູ່ໃນມື ໃນປີ 1941-1946, ລາວອິສສຣະແລະ ວຽດມິນກໍໄດ້ລຸກຂຶ້ນຕໍ່ສູ້ກັບຝຣັ່ງເສສ ດ້ວຍການໃຊ້ອາວຸທດັ່ງກວ່າ.



*<u>ຮູບທີ່ 8.</u> ທ່ານເຈົ້າແຂວງສາຍຄຳສຸທທະກະກຸມາຣ ເກີດປີ 1918 ໄດ້ອົພະຍົບໄປປະເທສຝຣັ່ງໄດ້ເສັຍຊີວິດ ຢູ່ທີ່ (Perpignan, France.) ເຈົ້າສາຍຄຳໄດ້ຕໍ່ສູ້ສົງຄາມ ວຽດມິນໃນປີ 1945 ຮ່ວມກັບ ຕູ້ບີ ລີຝູງ ແລະ ໄດ້ຕໍ່ສູ້ສົງຄາມວຽດນາມ ຄອມມຸຍນິສ ຮ່ວມກັບທ່ານ ນາຍພົນວ່າງປາວ ແຕ່ປີ 1960 ຈົນເຖິງປີ 1975 ຈຶ່ງໄດ້ອົພະຍົບໄປປະເທສຝຣັ່ງເສສ. ເປັນເຈົ້າພວນອົງໜຶ່ງທີ່ຮັກຄອບຄົວ, ຮັກປະຊາຊົນ, ບ້ານເມືອງຂອງຕົນທີ່ສຸດ ແລະມີບູນຄຸນໃຫ້ຊົນຊົນເຜົ່າມົ້ງທີ່ສຸດ (ເຊີນອ່ານຊີວະປະວັຕຂອງບຸກຄົນສຳຄັນ). <u>ຮູບທີ່ 9</u>. ທ່ານຕຸບີ ລີຝູງເກີດ ປີ 1919 ເສັຍຊີວິດ ທີ່ສູນສັມມະນາວຽງໄຊ ແຂວງຫົວພັນ ໃນປີ 1978 ຢ່າງທໍຣະມານ. ທ່ານທັງສອງຄົນ ແມ່ນຜູ້ນຳທີ່ໄດ້ຮ່ວມກັບຝຣັ່ງເສສ ຕໍ່ສູ້ວຽງມິນແລະລາວອິສສຣະ ສມັຍ 1945-1954 ພຣະຍາຕູ້ບີ ລີຝູງ ບໍ່ໄດ້ອົພະຍົບ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 10</u>. ເດັກຊາຍແຖວໜ້າ 1. ຕູ້ວື ລີຟູງ; 2. ຕູ້ຊົວລີຟູງ ; 3. ຕູ້ຊາ ລີຟູງ; 4. ຕູ້ລົງ ລີຟູງ. ເດັກຊາຍແຖວຫລັງ 5. ລີວ່າງ ລີຟູງ; 6. ລີຊີ ບລົງ ລີຟູງ; 7. ລີຄົວ ລີຟູງ. ເດັກທີ່ແມ່ອູ້ມຢູ່ແມ່ນ 8-ນາງເກົ້າລີ ລີຟູ່ງ; 9. ພັລະຍາຕູ້ບີ ລີຟູງ ( ພີ່ອ້າຍເສັຍຊີວິດ ຕູ້ບີ ລີຟູງໄດ້ເອົາເອື້ອຍໄພ້ເປັນເມັຍ ຊື່ ນາງຊົງ ຢາງ ແມ່ນລູກສາວ ຂອງທ່ານ ຕົງເຊັ້ງຢາງ); 10. ເຈົ້າຄຳຜຸຍ ວົງກົຕ ລູກສາວ ຄົນທີ່ ສາມ ຂອງ ເຈົ້າຄຳໝັ້ນວົງກົຕຣັຕນະ, ແລະ ເປັນເອື້ອຍຂອງເຈົ້າຄຳແພງ ວົງກົຕຣັຕນະ ອາດີຕພັຣຍາຂອງທ່ານຕຸເລັ້ງ ລີຟູງ; 11. ບໍ່ຮູ້ຊື່;12. ຢາງເມົາຊົງ; 13. ຢາງຊົງ. ຮູບຖ່າຍໃນວັນພຸທ ວັນທີ່ 28 ເດືອນກູມພາ (February) ປີ 1951.*

ໃນປີ 1946 ລາວອິສສຣະ; ນົ້ງ ລໍ ໄດ້ຖືກກວດລ້າງຈາກກອງທະຫາຣຂອງຝຣັ່ງເສສ ຈຶ່ງໄດ້ພ່າຍໜີ ອອກໄປລີ້ຊ່ອນ ຢູ່ໃນປະເທສໄທ໌ຍ ແລ້ວຕໍ່ໄປຢູ່ຕາມຊາຍແດນລາວ/ວຽດນາມພາກເໜືອ (ໂດຽສະເພາະ ເຣີ່ມ ຕົ້ນ ແມ່ນແຂວງໄຊຍະບຸຣີ) ແລະແຂວງຈຳປາສັກ. ໃນປີ 1946 ຝຣັ່ງໄດ້ບີບບັງຄັບໃຫ້ໄທ໌ຍສົ່ງ ສອງແຂວງນີ້ຄືນໃຫ້ຣາຊອານາຈັກລາວ. ຝ່າຍລາວອິສສຣະຈຶ່ງໄດ້ໂຕນໄປຝັ່ງສາລີ ພາຄເໜືອຂອງລາວ ແລະ ແຂວງເງອານ ຊາຍແດນວຽດນາມເໜືອ ຢູ່ເມືອງຢີຍເຊີນ. ໃນປີ 1945-1954, ຝຣັ່ງໄດ້ຫັນມາ ສົນ ໃຈນຳ ປະຊາຊົນລາວ ແລະຊຸມຊົນເຜົ່າມົ້ງດີຂຶ້ນ, ດ້ວຍເຫຕວ່າປະເທສຝຣັ່ງ ຫາກໍໄດ້ຫລຸດພົ້ນອອກ ຈາກ ກາຣ ຍຶດຄອງຂອງກອງທັພເຢຣະມັນ ໃນປາງສົງຄາມໂລກຄັ້ງທີ່ 2. ປະຊາຊົນຝຣັ່ງເສສ ແລະຊັພຍ໌ ສິນຂອງ ຊາຕ ໄດ້ສູນເສັຍໄປຢ່າງມາກມາຍ. ອີກປະກາຣນຶ່ງ ຣັຖບາລຝຣັ່ງເສສຍັງຖືວ່າປະເທສອິນດູຈີນ ຍັງແມ່ນ ຫົວເມືອງຂຶ້ນຂອງຕົນຢູ່ (ແລະກໍເຄີຍເປັນມາແຕ່ດົນນານແລ້ວ) ຈຶ່ງຢາກກັບໄປຟື້ນຟູເສຖກິຈ ຢູ່ ໃນພູມີ ພາຄດັ່ງກ່າວ ທີ່ມີຄວາມອຸດົມສົມບູນ ເພື່ອຈະເອົາໄປປົວແປງປະເທສຂອງຕົນ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເດືອນກັນຍາ (September) ປີ 1945, ຝຣັ່ງໄດ້ເລີ່ມຂົນອາວຸດສິງຄາມໃໝ່ໆ ໄປຈາກກັນກຸຕຕາ (Calcutta, India) ປະເທສອິນເດັຍ ນຳໄປສູ່ປະເທສລາວ ເພື່ອໄປຖິ້ມໃສ່ຈຸດຕ່າງໆ ທີ່ມີໜ່ວຍທະຫາຣຂອງຝຣັ່ງເສສກຳລັງລີ້ຊ່ອນຢູ່ ຄື: ພາກໃຕ້ຫລາຍແຂວງ ແມ່ນສະເດັຈເຈົ້າບູນອູ້ມ ນະຈຳປາສັກ ເປັນ ຜູ້ນຳຮ່ວມກັບຝຣັ່ງເສສ, ແຂວງຫລວງພຣະບາງ ແມ່ນເຈົ້າກິນດາວົງສ໌ ເປັນຜູ້ນຳຮ່ວມກັບຝຣັ່ງເສສ, ແຂວງຊຽງຂວາງ ແລະແຂວງຫົວພັນ (ຊຳເໜືອ) ແມ່ນທ່ານເຈົ້າສາຍຄຳ ສຸທະກະກຸມາຣ, ພຣະຍາຕູ້ບີ; ແລະທ່ານຈິງຕົວ ມົວ ເປັນຜູ້ນຳຮ່ວມກັບຝຣັ່ງເສສ. ດັ່ງທີ່ບັນທຶກໄວ້ຢູ່ຂ້າງບົນນີ້, ກາຣສູ້ຮົບກັບວຽດມິນ ແລະລາວອິສສຣະ ຢູ່ໃນບໍຣິເວນໜອງແຮດແລະບໍຣິເວນຊຽງຂວາງ ໄດ້ເຮັດໃຫ້ທ່ານພູມີ ວົງວິຈິດ ຫົວໜ້າຝ່າຍລາວອິສສຣະ ບໍ່ພໍໃຈໃຫ້ຜູ້ນຳຝຣັ່ງເສສແລະຜູ້ນຳເຜົ່າລາວແລະເຜົ່າມົ້ງ ຍ້ອນໄດ້ຈັບເອົາເຈົ້າ ແຂວງພຣະຍາເມືອງຂວາ ທ່ານຄຳເຫລັກ (ອ້າຍຂອງພຣະສັງຄະຣາຊບຸນທັນແລະພໍ່ຂອງ ດຣ. ຄ□າແສງ ແກ້ວແສງສຖິຕ) ຫົວໜ້າລາວອິສສຣະ ໄປປະຫາຣຊີວິຕ.

ໃນຕົ້ນເດືອນທັນວາ (December) 1945, ທ່ານຕູ້ເລັ້ຍ ແລະທ່ານປະຈ້າລີ ໄດ້ເດີນທາງໄປເກັບເກນເອົາປະຊາຊົນເຜົ່າມົ້ງຢູ່ໃນບໍຣິເວນເມືອງຜາ; ພູຜາໄຊ, ເກັບເກນໄດ້ປະມານສາມຮ້ອຍກວ່າຄົນ, ໄດ້ຕຽມຮຽນຝຶກການຕໍ່ສູ້ຢູ່ບ້ານສັນທໍ້. ໃນຂນະທີ່ກຳລັງຮຽນຢູ່ນັ້ນ ທະຫາຣລາວອິສສຣະຈຳນວນໜຶ່ງກອງຮ້ອຍໄດ້ບຸກເຂົ້າໄປໂຈມຕີບ້ານສັນທໍ້. ກອງທະຫາຣສັດຕຣູດັ່ງກ່າວ ໄດ້ຖືກດັກສະກັດຈາກປະຊາຊົນເຜົ່າມົ້ງຊຶ່ງມີແຕ່ປືນເພີງເທົ່ານັ້ນ ກາຣສູ້ຮົບຈຶ່ງບໍ່ໄດ້ຜົລດີເທົ່າທີ່ຄວນ. ທ່ານຕູ້ເລັ້ຍແລະທ່ານປະຈ້າລີ ເປັນຜູ້ນຳພາກອງກຳລັງປະມານ 300 ຄົນໄປສົມທົບກັບກຳລັງຂອງພຣະຍາຕູ້ບີ ແລະທ່ານເຈົ້າແຂວງສາຍຄຳ ເພື່ອໄປປົດປ່ອຍຕົວເມືອງຊຽງຂວາງ ຈົນສຳເຣັດ, ແລ້ວກໍນຳກຳລັງພົລປະມານ 600 ຄົນ ເຄື່ອນໄປທົ່ງໄຫຫີນ, ເມືອງສຸຍ, ພູວຽງ ແລະສາລາພູຄູນ. ເລີ່ມຈາກສາລາພູຄູນ ໄດ້ແບ່ງກຳລັງ ເປັນສອງຂະບວນ ຄື:

- 1. ສາຍຂບວນທີ່ໜຶ່ງມີກຳລັງປະມານ 300 ຄົນ ບັງຄັບບັນຊາໂດຍທ່ານຕູ້ເລັ້ຍ ລີຝຸງ, ໄດ້ເຄື່ອນໄປຕາມຖນົນເລຂທີ່ 13 ໄປສູ່ຫລວງພຣະບາງ ມີພາຣະກິດໄປປົດປ່ອຍພຣະບາທສົມເດັຈ ພຣະເຈົ້າສີສວ່າງວົງສ໌ ທີ່ຖືກທະຫາຣລາວອິສສຣະຄວບຄູມຢູ່ໃນພຣະຣາຊວັງ. ໄປພໍໄກ້ຈະເຖີງຫລວງພຣະບາງ ກອງທະຫາຣລາວອິສສຣະ ໄດ້ຖອຍໜີໄປກ່ອນແລ້ວ ຈຶ່ງໄດ້ໄປຮັກສາແລະປ້ອງກັນພຣະຣາຊວັງໄວ້ໃຫ້ເຈົ້າຊີວິດສີສຫວ່າງວົງສ໌.
- 2. ສາຍຂບວນທີ່ສອງ ມີກຳລັງພົລປະມານ 300 ຄົນ, ບັງຄັບບັນຊາໂດຍທ່ານປະຈ້າລີ, ເຄື່ອນອອກຈາກສະລາພູຄຸນ ໄປຕາມຖນົນເລຂທີ່ 13 ລົງໃສ່ເມືອງກາສີ ແລ້ວເດີນໄປຕາມທາງສັນພູສູງ ໄປຫາເມືອງພູນ ລົງໄປໃສ່ວັງວຽງ ມີພາຣະກິດໄປຊ່ວຍປົດປ່ອຍເອົາເມືອງຫລວງ ນະຄອນວຽງຈັນທນ໌ຂອງລາວ ທີ່ຢູ່ໃນການຄວບຄູມຂອງລາວອິສສຣະ. ເມື່ອເຖີງວັງວຽງ ໄດ້ມີກາຣປະທະກັບກອງກຳລັງຂອງລາວອິສສຣະ. ທ່ານປະຈ້າ ລີ ໄດ້ນຳກຳລັງຖອຍກັບຄືນ ພໍໄປເຖີງ ເມືອງພູນ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ລາວອິສສຣະກໍໄດ້ແຕກໜີອອກຈາກນະຄອນວຽງຈັນທນ໌ ໄປໃນວັນທີ່ 25 ເດືອນ ເມສາ (April) 1946.



<u>ຮູບທີ່ 11.</u> *ຜູ້ນຳຊຸມຊົນເຜົ່າມົ້ງໄດ້ຕໍ່ສູ້ລາວອິສສຣະ ແລະ ວຽດມິນຮ່ວມກັບຝຣັ່ງເສສ ສມັຍປີ1946.* ***ຈາກຊ້າຍຫາຂວາແຖວໜ້າ****: 1.ຈືຊາວລີ ນາຍບ້ານພັກແວ່ນ; 2. ຕົງໄກຊົງ ຕາແສງພູສັນນ້ອຍ; 3. ຢົ້ວຈາວຊົງ ຕາແສງເມືອງຜາ; 4. ຊົວຕົວລີ ຕາແສງແກ້ງຄວາຍ.* ***ແຖວ ສອງ ຈາກຊ້າຫາຂວາ****:1-ເບັ່ງຈື້ວ່າງພໍ່ຕົງໝອງແຣດ ພໍ່ຂອງທ່ານນາຍພົນວ່າງປາວ; 2. ເຈັ່ຍວາ ຊົງ ຕາແສງພັກເລີ້ງ; 4. ໜາວຢີຢາງໆຕາແສງພູຟ້າ; 5.ຈົງຕົວມົວ ນາຍກອງ ຜູ້ທຳອິດຂອງພີ່ນ້ອງມົ້ງ ຢູ່ພູດູ.* ***ແຖວຫລັງສຸດ****; 1. ພຣະຍາດຳຣົງ ຣິທິໄກ ຕູບີ ລີຟຸງ ເຈົ້າເມືອງມົ້ງຜູທຳອິດ ໃນແຂວງຊຽງຂວາງ; 2. ລີຈາວ ລີຟຸງ ; 3. ເຈົ້າຄຳໝັ້ນວົງກົຕຣັຕນະເລຂາທິການ ພຸທທະບັນດິຕ ສະພາອານາຈັກລາວ; 4. ໄຊຊາວຢາງ ນາຍບ້ານຫີນຕັ້ງ; 5. ໄຊປາວ ວ່າງ ຕາແສງນາວັງ; 6. ພະນັກງານ ພຸທທະບັນດິຕສະພາອານາຈັກລາວ; 7. ຕູເລັ້ຍລີຟຸງ. ຮູບຖ່າຍ ຢູ່ຕໍ່ໜ້າວັດພຣະແກ້ວ ໄກ້ ທີ່ວາການ ພຸທທະບັນດິຕ ສະພາ ອາ ນາຈັກລາວໃນວັນທີ່ 23 ເດືອນມະກະຣາ (January) 1950.*

ຕອນກັບໄປເຖິງຊຽງຂວາງ ທ່ານໄຊປາວ ວ່າງ ຫົວໜ້າໜ່ວຍກຳລັງ ທີ່ໄປຈາກເມືອງຜາແລະພູຜາໄຊ ເວົ້າວ່າ: "ຜູ້ມີການສຶກສາເທົ່ານັ້ນ ຈຶ່ງສົມຄວນເປັນຜູ້ນຳ ເພາະເຫັນວ່າຕົນເອງບໍ່ມີການສຶກສາ ບໍ່ມີຄວາມຮູ້ຈະເຮັດຫັຍງ ກໍຍາກ, ພຣະຍາຕູ້ບີ ລີຟຸງ ແຕ່ງຕັ້ງໃຫ້ເປັນນາຍທະຫາຣ ກໍຢ້ານ". ໃນເດືອນກຸມພາ (February) 1947, ຈຶ່ງໄດ້ພາລູກແລະນ້ອງໆ ທັງໝົດຍ້າຍໄປຢູ່ບ້ານດົງດ່ານ ໄກ້ໆບ້ານລາດຮວ້ງ ແລະບໍ່ໄກຈາກຊຽງຂວາງ ຄົນໃນຄອບຄົວຈຶ່ງໄດ້ມາເຂົ້າໂຮງຮຽນ. *(ຜູ້ບັນທຶກ ກໍແມ່ນຜູ້ໜຶ່ງໃນຄອບຄົວ ທີ່ໄດ້ໄປເຂົ້າໂຮງຮຽນໃນປີ 1947).* ເປັນຄອບຄົວຄົນມົ້ງທຳອິດໃນແຂວງຊຽງຂວາງ ທີ່ໄດ້ເຂົ້າໄປຮຽນຮູ້ ພຣະເຈົ້າ ແລະເປັນຄອບຄົວ "ຄຣິສຕຽນ" ທີ່ໄດ້ນຳພາຫລາຍໆຄອບຄົວເຜົ່າລາວ ແລະເຜົ່າມົ້ງ ມາຮຽນຮູ້ພຣະຜູ້ເປັນເຈົ້າ.

ທ່ານຕູ້ເລັ້ຍຊຽນວ່າ: ການປຸກຣະດົມເອົາປະຊາຊົນເຜົ່າມົ້ງເຂົ້າໄປຕໍ່ສູ້ລາວອິສສຣະແລະວຽດມິນຄັ້ງນີ້ ໄດ້ເຮັດໃຫ້ປະຊາຊົນເຜົ່າມົ້ງ ຮູ້ຈັກຄູ້ນເຄີຍກັນຫລາຍຂຶ້ນ, ມີການນຳພາເປັນກຸ່ມເປັນກ້ອນ, ຊຶ່ງແຕກຕ່າງກັບສໄມກ່ອນ ທີ່ຊົນຊຸມຊົນເຜົ່າມົ້ງໄດ້ອົພະຍົບ ໜີລີ້ງມາຈາກປະເທສຈີນແຜ່ນດິນໃຫຍ່ ມາອາສັຍ ຕັ້ງ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຖິ່ນຖານຢູ່ໃນປະເທສລາວ ບໍ່ໄດ້ຮູ້ຈັກກັນດີ ຕ່າງຄົນຕ່າງຢູ່ ເປັນກຸ່ມນ້ອຍໆ ບໍ່ມີຄວາມກ້າວໜ້າຈະເຣີນ ດ້ານຄວາມຄິດແລະສຕິປັນຍາ. ຫລັງຈາກການເຂົ້າໄປພົວພັນກັບການຕໍ່ສູ້ນີ້ ຊຸມຊົນເຜົ່າມົ້ງແລະເຜົ່າລາວ ມີການຮ່ວມມືກັນຢ່າງດີ ແລະຮັກແພງກັນຫລາຍຂຶ້ນ.

ໃນສໄມລາວອິສສຣະໄດ້ຕໍ່ສູ້ຝຣັ່ງເສສ ຊຶ່ງເວລານັ້ນ ປະເທສລາວ ຍັງຕົກເປັນຫົວເມືອງຂຶ້ນຂອງຝຣັ່ງເສສຢູ່ ຈຶ່ງພາໃຫ້ເກີດມີລາວສອງຝ່າຍ ຫລື ສອງພັຄການເມືອງຄື:

- ພັກລາວອິສສຣະ, ນຳພາໂດຍສະເດັຈເຈົ້າເພັຊຣາຊ ເປັນຝ່າຍເສັຍສົງຄາມ
- ພັກລາວ ຮ່ວມກັບຝຣັ່ງເສສ ມີຜູ້ນຳຫລາຍທ່ານ ແຕ່ເໜືອຕລອດໃຕ້ ເປັນຝ່າຍໄດ້ປຽບໃນການຕໍ່ສູ້ກັບຝ່າຍລາວອິສສຣະແລະວຽດມິນ.

ຢູ່ໃນນະຄອນວຽງຈັນທນ໌ ສະເດັຈເຈົ້າເພຊຣາຊ ເປັນປະມຸກ, ໄດ້ຈັດຕັ້ງຣັຖບາລແລະໄດ້ແຕ່ງຕັ້ງພຍາ ຄຳມ້າວວິໄລ ເປັນນາຍົກຣັຖມົນຕຣີ ໃນວັນທີ່ 12 ເດືອນຕຸລາ (October) ປີ 1945 ປະກອບດ້ວຍ ຣັຖມົນຕຣີ 11 ທ່ານ (ເບິ່ງໃນກາຣຈັດ ຕັ້ງຣັຖບາລ). ໄດ້ປະກາສປົດເຈົ້າຊີວິດສີສຫວ່າງວົງສ໌ ອອກ ຈາກໜ້າທີ່ເຈົ້າຊີວິດລາວ.

ໃນທ້າຍປີ 1945, ການສູ້ຮົບລະຫວ່າງສອງຝ່າຍຢູ່ທົ່ວປະເທສ, ລາວອິສສຣະເປັນຝ່າຍເສັຍສົງຄາມ ແລະໄດ້ແຕກກະຈັກກະຈາຍໄປຄື: ສ່ວນໜຶ່ງ ໄດ້ໂຕນຂ້າມແມ່ນ້ຳຂອງໄປປະເທສໄທ໌ຍ, ໃນເວລາຂີ່ເຮືອຂ້າມແມ່ນ້ຳຂອງນັ້ນ ເຈົ້າສຸພານຸວົງສ໌ໄດ້ຮັບບາດເຈັບສາຫັດ ດ້ວຍລູກກະສູນປືນ ຍິງລົງມາຈາກເຄື່ອງບິນ ຂັບໄລ່ຂອງຝຣັ່ງເສສ. ຄົນວຽດນາມໃນປະເທສໄທ໌ຍ ໄດ້ຊ່ວຍພາໜີໄປໄດ້. ເມື່ອສຸຂພາບໄຄແດ່ເຈົ້າ ສຸພານຸວົງສ໌ກໍໄດ້ກັບຄືນໄປຫານາຍເໜືອຫົວ ຄືໂຮຈິມິນ ທີ່ວຽດນາມເໜືອ ແລະມີຜູ້ຕິດຕາມໄປມີຄື: ທ່ານພູມີ ວົງວິຈິດ; ທ່ານໂຊດ ເພັດລາສີ; ທ່ານແກ້ວ ວິພະກອນ; ທ່ານໜູຮັກ; ທ່ານໄກສອນ ພົມວິຫານ; ທ່ານກົມມະໂພນເສນາ; ທ່ານໄຟດາງ ລໍ; ທ່ານລໍຝູງ ແລະ ອີກຫລາຍທ່ານ. ອີກຄນະໜຶ່ງນັ້ນ ໄດ້ກັບ ເຂົ້າມາຮ່ວມຣັຖບາລລາວ ທີ່ນະຄອນວຽງຈັນທນ໌.

ສະພາບການປົກຄອງ ຢູ່ໃນປະເທສວຽດນາມ ສໄມເປັນຫົວເມືອງຂຶ້ນຂອງປະເທສຝຣັ່ງເສສ ກໍຄ້າຍຄືກັນກັບຢູ່ໃນປະເທສລາວ. ຝຣັ່ງໄດ້ຍົກເອົາເຈົ້າຊາຍຫງຽນວິນທຸຍ (Nguyen Vinh Thuy) ພຣະ ຣາຊບຸຕສົມເດັຈພຣະເຈົ້າຈັກກະພັຕກາຍເດິນ ຂຶ້ນສເວີຍຣາຊບັນລັງ ທຣົງພຣະນາມວ່າ ສົມເດັຈພຣະ ເຈົ້າຈັກກະພັຕບາວດາຍ. ພ້ອມກັນນັ້ນ ຍັງໄດ້ແບ່ງວຽດນາມອອກເປັນສາມເຂຕ ເພື່ອຄວາມສະດວກ ໃນການປົກຄອງຄື: ວຽດນາມເໜືອ (Tonkin); ວຽດນາມກາງ (Annam); ວຽດນາມໃຕ້ (Cochinchine). ດ້ວຍເຫຕນີ້ ຊາວອິນດູຈີນຈຶ່ງຕ້ອງລຸກຂຶ້ນຕໍ່ສູ້ຝຣັ່ງເສສ. "ສາເຫຕດັ່ງກ່າວຢູ່ຂ້າງເທິງນີ້, ທ່ານໂຮຈິມິນ ໄດ້


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເກີດຄວາມບໍ່ພໍໃຈ ຕໍ່ລະບົບການປົກຄອງ ຝຣັ່ງເສສ, ຈຶ່ງພາໃຫ້ວຽດນາມມີສອງ ພັກການເມືອງເກີດຂຶ້ນ, ແລະ ມີການໃຊ້ກຳລັງທາງທະຫານເຂົ້າສູ້ຮົບກັນ.

ໂຮຈິມິນ (ຫລືຫງຽນໄອກວກ) ຕາມທີ່ຮູ້ ເກີດປີ 1890, ໄດ້ເສັຍຊີວິຕ ໃນວັນທີ່ 20 ເດືອກໍຣະກະດາ (July) ປີ 1969 ຢູ່ທີ່ຮາໂນ້ຍ ປະເທສວຽດນາມເໜືອ. ໂຮຈິມິນໄດ້ຮຽນຈົບລັທທິຄອມມຸຍນິສຕ໌ ອອກຈາກໂຮງຮຽນປະເທສຝຣັ່ງເສສ. ໃນປີ 1927, ໄດ້ເດີນທາງໄປຮຽນຕໍ່ທີ່ປະເທສຣັສເຊັຍ ເມື່ອສຳເຣັດການຮຽນແລ້ວ ໃນປີ 1928 ທ່ານໂຮຈິມິນໄດ້ເຂົ້າໄປໃນປະເທສໄທ໌ຍ ແຖວອຸດອຣທານີ, ສາກົນນະຄອນ, ນະຄອນພະນົມ ໄປລີ້ຊ່ອນຢູ່ບ້ານນາຈອກ ເພື່ອປຸກຣະດົມຊາວວຽດນາມໃນປະເທສໄທ໌ຍ ໃຫ້ລຸກຂຶ້ນ ຕໍ່ສູ້ເອົາເອກກະຣາຊຈາກຝຣັ່ງເສສ ເພາະເວລານັ້ນ ປະເທສໄທ໌ຍມີນະໂຍບາຍ ບໍ່ຄ່ອຍລອງຣອຍ ກັບຝຣັ່ງເສສ.

ໃນປີ 1931, ຫງຽນໄອກວກ ໄດ້ເດີນທາງໄປຮົງກົງ (Hong Kong) ເພື່ອຕິດຕໍ່ຊາວວຽດນາມເໜືອ ເລີຍຖືກອັງກິສຈັບແລະໄດ້ຕິດຄຸກ. ອັງກິສ ບໍ່ຢາກມີເຣື່ອງກັບຝຣັ່ງ ຈຶ່ງປ່ອຽຂ່າວວ່າ ຫງຽນໄອກວກ ເສັຽຊີ ວິດຢູ່ໃນຄຸກ ແລ້ວຕໍ່ມາ ກໍ່ປ່ອຍ ຫງຽນໄອກວກ ອອກຈາກຄຸກຢ່າງງຽບໆ. ໃນປີ 1934, ຫລັງຈາກ ຖືກປ່ອຍອອກຈາກຄຸກແລ້ວ ໄດ້ເດີນທາງກັບໄປຣັສເຊັຍ ແລະເລີ່ມເອົາຊື່ ໂຮຈິມິນ ມາໃຊ້ແທນ ເພື່ອ ດຳເນີນການຕໍ່ສູ້ຕໍ່ໄປ. ໃນປີ 1941, ໄດ້ເຂົ້າໄປໃນວຽດນາມເໜືອ ແລະໄດ້ໄປອາໄສຍ ນຳຊາວນົງ, ຊາວໄທດຳ, ໄທຂາວ ແລະຊາວເຜົ່າມົ້ງ ຢູ່ພາຄເໜືອ, ຈັດຕັ້ງຂຶ້ນເພື່ອຈຸດປະສົງ ທຳທ່າຂໍການຊ່ວຍ ເຫລືອຈາກສະຫະຣັຖເພື່ອຕໍ່ສູ້ກັບຍີປຸ່ນ ແຕ່ເມື່ອໄດ້ອາວຸທແລ້ວ ເລີຍເອົາອາວຸດນັ້ນມາໃຊ້ ເພື່ອຕໍ່ສູ້ ກັບຝຣັ່ງເສສ. ເພື່ອວາງແຜນປົດປ່ອຍປະເທສວຽດນາມ ອອກຈາກການເປັນທິວເມືອງຂຶ້ນ. ໃນລະຍະນັ້ນ ຝຣັ່ງເສສຍັງມີບັນຫາຫລາຍທີ່ສຸດ ຍ້ອນສົງຄາມໂລກຄັ້ງທີ່ສອງ.

ໃນປີ 1945 ໂຮຈິມິນແລະລາວອິສສຣະ ໄດ້ເລີ່ມຈັດຕັ້ງໜ່ວຍກູ້ຊາຕ. ໃນວັນທີ່ 15 ເດືອນສິງຫາ (August) ປີ 1945, ໂຮຈິມິນ ໄດ້ນຳພາຂະບວນການຕໍ່ສູ້ຝຣັ່ງເສສ ຢູ່ໃນປະເທສວຽດນາມຫລາຍບ່ອນ. ໃນວັນ ທີ່ 27 ເດືອນສິງຫາ (August) ປີ 1946, ສະພາບການໄດ້ປ່ຽນແປງ ຈຶ່ງພາໃຫ້ຝຣັ່ງເສສ ໄດ້ມີໂອກາສເຂົ້າໄປມີອຳ ນາຈໃນອິນດູຈີນອີກ. ໄດ້ເຮັດໃຫ້ໂຮຈິມິນ ພ້ອມດ້ວຍກຳລັງວຽດມິນ ແລະ ລາວອິສສຣະ ຕ້ອງໄດ້ ໜີອອກໄປຢູ່ປ່າ, ເພື່ອຕັ້ງຫລັກຕໍ່ສູ້ແບບກອງໂຈຣ. ການຕໍ່ສູ້ດັ່ງກ່າວ ໄດ້ຂຍາຍ ກວ້າງອອກໄປເລື້ອຍໆ. ຝຣັ່ງເສສຈຶ່ງໄດ້ເພີ່ມກຳລັງທະຫາຣ ໄປປາບຝ່າຍວຽດມິນ ແລະ ລາວອິສສຣະ ເວລາມີການສູ້ຮົບ ກໍ່ມີການເສັຍຫາຍຊີວິດປະຊາຊົນ ແລະຊັພຍ໌ສິນສິ່ງຂອງຕ່າງໆ ໄດ້ເຮັດໃຫ້ປະຊາ ຊົນວຽດນາມ ຄຽດແຄ້ນແລະ ກຽດຊັງ ເຈົ້າໜ້າທີ່ຝຣັ່ງເສສ ຫລາຍຂຶ້ນ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

 

*รูบที่ 12 (ຊ້າຍ). ທ່ານ ໂຮຈິມິນ ເກີດ 1890 ເສັຍຊີວິດ ໃນ ວັນທີ່ 20 ເດືອນ ກໍຣະກະດາ (July) ປີ 1969, ທີ່ຮ່າໂນຍວຽດນາມເໜືອ. ໄດ້ລັກ ຂຶ້ນເຮືອຝຣັ່ງເສສ ເດີນທາງໄປ ປະຈິນໄພຍ ທີ່ປະເທສຝຣັ່ງເສສ ຈຶ່ງໄດ້ຮຽນຈົບ ຫລັກການຄອມມຸຍນິສ ເພື່ອ ນຳກັບ ມາກູ້ຊາຕ. ຮູບນີ້ ທ່ານໂຮຈິມິນ ກຳລັງສຶກສາວາງແຜນໂຈມຕີຄ້າຍທະຫານຝຣັ່ງ ທີ່ດຽນບຽນຟູ ໃນປີ 1954. ຮູບທີ່ 13 (ຂວາ). ກ່ອນນັ້ນ ໃນປີ 1951 ກໍໄດ້ພົບກັບໄກສອນພົມວິຫານ ຕັ້ງນຶ່ງແລ້ວຢູ່ເມືອງຫາດໂນ່ຍ*

ໃນປີ 1949 ການເມືອງໃນປະເທສຈີນໄດ້ປ່ຽນແປງ ຈາກຣະບອບປະຊາທິປະໄຕຍ ໄປສູ່ຣະບອບຄອມມຸຍນິສຕ໌ ຄືຈາກຜູ້ນຳຈຽງໄກເຊັກ ໄປໃສ່ຜູ້ນຳເມົາເຈີຕຶງ. ໃນປີ 1950 ໄດ້ມີການສູ້ຣົບກັນຢູ່ເກົາຫລີ ລະຫວ່າງຝ່າຍຕາວັນຕົກແລະຕາວັນອອກ ຄືຈີນແຜ່ນດິນໃຫ່ຍ ເປັນຜູ້ສນັບສນູນເກົາຫລີເໜືອ. ໃນປີ 1950 ສຖານະການໃນອິນດູຈີນ ໄດ້ມີການຕໍ່ສູ້ກັນຮູນແຮງຂຶ້ນ ຈຶ່ງເປັນໂອກາດໃຫ້ໂຮຈິມິນ ໄດ້ຕັດສິນໃຈເຂົ້າພັຄຄອມມຸຍນິສຕ໌ໂລກ ຈີນແຜ່ນດິນໃຫ່ຍ ໂດຍໃຊ້ຊາຍແດນຈີນ-ວຽດນາມ ແລະລາວ ເປັນສູນຝຶກກຳລັງຂອງວຽດມິນ. ເມື່ອສຖານະການກາຍເປັນເຊັ່ນນັ້ນ, ຣັຖບາລຝຣັ່ງເສສແລະສະຫະຣັຖ ຈຶ່ງມີຄວາມວິຕົກກາງວົນ ຢ້ານລັທທິຄອມມຸຍນິສຕ໌ ຈະເຕີບໃຫ່ຍແລະຈະຂຍາຍຕົວ ໄປສູ່ພາຄອື່ນໆ ໃນເອເຊັຍ ຕາວັນອອກສ່ຽງໃຕ້. ຝຣັ່ງເສສແລະສະຫະຣັຖຈຶ່ງໄດ້ຕັດສິນໃຈ ສ້າງຖານທັພຂຶ້ນຢູ່ທີ່ດຽນ ບຽນຟູ ເພື່ອຂັດ ຂວາງການຂຍາຍລັທທິຄອມມຸຍນິສຕ໌ດັ່ງກ່າວ ພ້ອມທັງໄດ້ຕັ້ງຄ້າຍ ທະຫານຫລາຍ ແຫ່ງຂຶ້ນ ຄື:

- ຢູ່ແຂວງຜົ້ງສາລີ ມີຄ້າຍເມືອງຂວາ, ຄ້າຍເມືອງງອຍ ຂຶ້ນກັບກອງບັນຊາການນ້ຳບັກ ຢູ່ໃນປະເທສລາວ, ແລະ
- ຈັດໃຫ້ມີທະຫານບ້ານ ປະກອບອາວຸທຫລາຍພັນຄົນ ເພື່ອຕຽມຕໍ່ສູ້ກັບວຽດມິນຢູ່ໃນປະເທສວຽດນາມເໜືອ. ກອງທະຫານບ້ານເຫລົ່ານີ້ ມີຫລາຍຊົນຊາຕຊົນເຜົ່າເຂົ້າປະກອບສ່ວນນຳ ເປັນຕົ້ນຄືເຜົ່າມົ້ງ (ຜູ້ນຳແມ່ນ ທ່ານວ່າງຈິງ), ເຜົ່າໄທດຳ (ໂດຍແມ່ນທ່ານແດວັນອານເປັນຜູ້ນຳ) ພ້ອມທັງເຜົ່າໄທຂາວ ແລະຄົນວຽດນາມຫລາຍທ່ານ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 14. ຄນະຜູ້ນຳຊຸມຊົນເຜົ່າມົ້ງ ທີ່ໄດ້ລຸກຂຶ້ນຕໍ່ສູ້ສົງຄາມໃນອິນດູຈີນ ຣ່ວມກັບຝຣັ່ງເສສ ສມັຍ ປີ 1945-1948 (ຮູບຖ່າຍປີ 1948). **ຈາກຊ້າຍຫາຂວານັ່ງແຖວໜ້າ** 1. ທ່ານປະລື້ ລີ ພໍ່ຕົງ ພັກບູນ; 2. ທ່ານ ເນັ່ງຈື້ ວ່າງ ພໍ່ຕົງໜອງແຮດ ພໍ່ຂອງທ່ານນາຍພົນ ວ່າງປາວ; 3. ທ່ານ ຕູບີ ລີຟຸງຫົວໜ້າຄນະ ; 4. ທ່ານໝາວເຈົາ ລີຟຸງ ຕາແສງພັກບູນ; 5. ທ່ານ ລີຊົງ ຕາແສງພູດາວພໍ່ ໄກ້ກັບ LS26 ຊຽງແດດ; 6. ທ່ານ ຢົ້ວຈາວຊົງ ຕາແສງເມືອງຜາ. **ຈາກຊ້າຍຫາຂວາແຖວຢືນ**: 1. ທ່ານຢົ້ວປາວຢາງຮອງເຈົ້າແຂວງຊຽງຂວາງ; 2-ທ່ານຢົງວື ຈ້າ ພໍ່ຕົງໜອງແຮດ; 3. ທ່ານລີວ່າ ລູກຊາຍເຈົ້າເມືອງຕົງປາວລີ; 4. ທ່ານຈືຊາວລີ ພໍ່ຕົງຜາແວນ; 5. ທ່ານໄຊສ້າວຢາງ ນາຍບ້ານຫີນຕັ້ງ; 6. ທ່ານເຈັ່ຍຊ້າງມົວ ນາຍກອງ ພໍ່ຂອງທ່ານຕູມົວເລັ້ຍ; 7. ທ່ານ ໝາວຢີຢາງ ຕາແສງພູຟ້າ; 8. ທ່ານຊົວຕົວລີ ຕາແສງແກ້ງຄວາຍ; 9. ທ່ານເຈັ່ຍວ່າຊົງ ຕາແສງພັກເລົ້ງ; 10. ທ່ານຕົງໄກຊົງ ຕາແສງພູສັນນ້ອຍ. (ຮູບຖ່າຍຢູ່ເມືອງຊຽງ ຂວາງ ໃນປີ 1948 ຕອນ ພະຍາຕູ້ບີ ລີຟຸງ ຂຶ້ນເປັນເຈົ້າເມືອງມົ້ງຜູ້ທຳອິດໃນລາວ)*



*ຮູບຊຸທີ່ 15. ນາຍກອງຈົງຕົວມົວແລະ ສ.ອ. ວິລລີຮາຊ (Sergent Willy Haze) ເອີ້ນຮ່າເຊ່ ຫລືຮ່າເຢ ຄົນຝຣັ່ງ ເສສເຊື້ອສາຍເຢັຍຣະມັນ ໄດ້ເປັນຊາວສວນ ຫລັງຈາກພົ້ນກຳນົດອາຍຸເປັນທະຫາຣ ຖືກສົ່ງມາຢູ່ຊັງໄຂ ແລະໄດ້ໄປເຮັດສວນ ຢູ່ພູດູ ໄກ້ກັບທ່ານຈົງຕົວມົວ ນາຍກອງພູດູ ໃນປີ 1950 ເພື່ອເອົາຜັກໄປລ້ຽງ ທະຫາຣຝຣັ່ງທີ່ຊັງໄຂ. ນາຍກອງຈົງຕົວ ໄດ້ເສັຍຊີວິດຕົ້ນປີ 1952 ຍ້ອນອຸປະຕິ ເຫຕຣົຖຂ້ວມ ເພາະຍັງຂັບຣົຖບໍ່ສຳນານພໍ.*



*ຮູບທີ່ 16. ທ່ານໄຊປາວຕາແສງນາວັງ ແລະ ພ.ອ. ເຈີ ປາວມົວ ຜູ້ຢູ່ກາງແມ່ນໄຈດາງວ່າງ. ທ່ານໄຊ ປາວວ່າງ ຜູ້ຕໍ່ວ່າບໍ່ໃຫ້ພຣະຍາຕຸບີ ຖອນ ອອກຈາກຊຽງຂວາງ ໃນ ວັນທີ່ 26 ເດືອນ ມະກະຣາ (January) 1946. ທ່ານ ພ.ອ. ເຈີປາວມົວ ຜູ້ບັນຊາການຄ້າຍທະຫານ LS32 ຢູ່ ບວມຫລົງ ມີທະຫານບໍ່ຕ່ຳກວ່າ 12 ພັນຄົນ (Regiment 28) ຜູ້ກ່ຽວໄດ້ພາຄອບ ຄົວອົພຍົບມາເຖິງເມືອງໄທຍ໌ ແຕ່ບໍ່ຍອມປະລູກນ້ອງ ໄດ້ກັບໄປເສັຍຊີວິດຢູ່ລາວໃນປີ 1994.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1951-1954, ສົງຄາມອິນດູຈີນຂອງຝຣັ່ງເສສ ໄດ້ມີການຕໍ່ສູ້ກັນຢ່າງໜັກ ກັບຝ່າຍຄອມມຸຍນິສຕ໌. ຜົລສຸດທ້າຍ ຝຣັ່ງເສສຕ້ອງເສັຍສົງຄາມອິນດູຈີນ ຈຶ່ງໄດ້ພາໃຫ້ມີອົພະຍົບຫລາຍພັນຄົນ ໄດ້ໜີອອກຈາກວຽດນາມເໜືອ ເຂົ້າມາຢູ່ຣາຊອານາຈັກລາວ, ຣາຊອານາຈັກໄທ໌ຍ ແລະ ໂດຽສະເພາະ ແມ່ນປະເທສຝຣັ່ງເສສ ສ່ວນຫລາຍແມ່ນພວກມີການສຶກສາ.

ຣ.ທ. ວ່າງຈົງເປັນຜູ້ນຳເຜົ່າມົ້ງ ໄດ້ໜີອອກຈາກວຽດນາມເໜືອເຂົ້າມາຕັ້ງຖິ່ນຖານໃນຣາຊອານາຈັກລາວ.





*ຮູບທີ່ 17. ທ່ານ ຣ.ທ. ວ່າງຈົງ ຜູ້ນຳເຜົ່າມົ້ງທີ່ດຽນບຽນຟູ Lt. Vang Chong (ຮູບໃນປີ 1952). ທ່ານໄດ້ອົພະຍົບມາ ຢູ່ລາວໃນປີ 1955. ທ່ານໄດ້ເສັຍຊີວິດຢູ່ທີ່ລ່ອງແຈ້ງ ປະເທສລາວໃນເດືອນເມສາ ປີ 1973 ດ້ວຍໂລກສະຣາ. ຮູບທີ່ 18. ທ່ານແດວວັນອານຜູ້ນຳເຜົ່າໄທດຳ ໃນດຽນບຽນຟູ (Cdt. Deo Van An, Thai Dam Leader) ຮູບປີ 1954 ໄດ້ອົພະຍົບໄປຢູ່ຝຣັ່ງ 1955*



*ຮູບທີ່ 19. ທົວໜ້າເຜົ່າໄທຂາວຈາກຊ້າຍ ອົງຊາງ (Sang), ອົງແຢນ (Dzeng), ແລະ ອົງ ຢິນ (Dzin)*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ຊີວະປະວັດຫຍໍ້ຂອງ ທ່ານ ຣ.ທ. ວ່າງຈົງ ຫລື ວ່າງຈົງຕົວ

ເກີດເມື່ອເດືອນສິງຫາ August 1919, ທີ່ບ້ານຫວ້ຍສັນ, ຕາແສງດຽນບຽນຝູ, ແຂວງໄລເຈົາ ຊຶ່ງແມ່ນເມືອງໄທຂາວ ຢູ່ທາງພາກເໜືອຂອງປະເທດຫວຽດນາມ. ທ່ານເສັຍຊີວິດຢູ່ພາກສອງ ທີ່ລ່ອງແຈ້ງ ແຂວງຊຽງຂວາງ ເດືອນເມສາ (April) ປີ 1973. ເມື່ອອາຍຸໄດ້ 10 ຂວບ ພີ່ອ້າຍຂອງພໍ່, ຊື່ເລັ່ງຫວາ ວ່າງ, ໄດ້ສົ່ງວ່າງຈົງໄປເຂົ້າໂຮງຮຽນຢູ່ເມືອງດຽນບຽນຝູ, ວ່າງຈົງໄດ້ໄປອາໄສຢູ່ໃນບ້ານຂອງໝູ່ຂອງພໍ່ລູງ ທີ່ເປັນຄົນເຜົ່າໄທດຳ ຢູ່ໄກ້ກັບໂຮງຮຽນ ເພື່ອບໍ່ໃຫ້ຂາດການຮຽນ. ໃນປີ 1936, ດາງເສັ່ງວ່າງ ຜູ້ເປັນອ້າຍຂອງພໍ່ວ່າງຈົງ ມີຕຳແໜ່ງເປັນນາຍກອງ, ໄດ້ເອີ້ນວ່າງຈົງອອກຈາກໂຮງຮຽນມາຮັບໃຊ້ເຮັດວຽກ ກ່ຽວກັບການບັນທຶກດ້ານເຈັ້ຍສໍຕ່າງໆ ເພາະວ່າສມຽນຂອງທ່ານ ບໍ່ມີຄວາມຊຳນານໃນດ້ານສະມຸດ ບັນຊີ.

ໃນປີ 1944, ທ່ານ ພ.ຕ. ອິມຟົວ (Cdt. Imfeld) ນາຍທະຫານຝຣັ່ງເສສ ໄດ້ອອກຄຳສັ່ງແຕ່ງຕັ້ງ ວ່າງ ຈົງເປັນຜູ້ວ່າໜ້າທີ່ຮອງເຈົ້າເມືອງໆດຽນບຽນຝູ, ເພື່ອປົກຄອງປະຊາຊົນເຜົ່າມົ້ງ, ເຜົ່າໄທດຳ, ແລະ ເຜົ່າລາວເທີງ ປະມານ 18 ພັນຄົນ. ໃນປີ 1945, ວ່າງຈົງຖືກຈັບໂດຍທະຫານຍີປຸ່ນ ໄປຂັງຄຸກປະມານໜຶ່ງເດືອນ; ເຈົ້າໜ້າທີ່ຍີປຸ່ນໄດ້ສົ່ງຈົດໝາຍເຖິງນາຍກອງ ດາງເສັ່ງ ວ່າງ ບອກວ່າໃຫ້ເກັບເງິນສາມພັນກີບ (ເປັນເງິນກີບເກົ່າ ຫລືເງິນປີ້ສິດ) ສົ່ງໃຫ້ເຈົ້າໜ້າທີ່ຂອງຍີປຸ່ນ, ເພື່ອໄປປະກັນເອົາຕົວວ່າງຈົງ ອອກຈາກ ຄຸກ. ບັງເອີນ ປະເທດຍີປຸ່ນຖືກຮະເບີດປຣາມານູ, ວ່າງຈົງກໍຖືກປ່ອຍຕົວກັບບ້ານ ໂດຍບໍ່ໄດ້ເສັຍເງິນ. ໃນປີດຽວກັນນັ້ນ ທ່ານຜູ້ຮອງເຈົ້າເມືອງວ່າງຈົງ ໄດ້ນຳພາປະຊາຊົນເຜົ່າມົ້ງປະມານ 40 ຄົນເຂົ້າໄປໃນບໍຣິເວນແຂວງນ່ານ ທາງທິດໃຕ້ຂອງປະເທດຈີນ, ເພື່ອໄປຕອ້ນຮັບເອົາຄົນຝຣັ່ງເສສ ຜູ້ໄດ້ໄປລີ້ພັຍສມັຍສົງຄາມຍີປຸ່ນ ໃຫ້ກັບຄືນມາຢູ່ຄ້າຍຝຣັ່ງເສສ ທີ່ໄລເຈົາ ວຽດນາມເໜືອ ແລ້ວໄດ້ຕັ້ງຄ້າຍທະຫານ ຂຶ້ນຢູ່ທີ່ດຽນບຽນຝູ.

ໃນເດືອນພຶສຈິກາ (November) 1949, ທະຫານເຜົ່າໄທຂາວ ຈຳນວນສອງກອງຮ້ອຍ ໄດ້ໂຈມຕີບ້ານຂອງຊາວເຜົ່າມົ້ງ, ຈູດເຜົາບ້ານເຮືອນຈົນໝົດກ້ຽງ. ບັນຫາທີ່ເກີດຂຶ້ນໃນຄັ້ງນັ້ນ ຝຣັ່ງເສສບໍ່ສາມາດແກ້ໄຂໄດ້. ດັ່ງນັ້ນ ທ່ານວ່າງຈົງ ຈຶ່ງໄດ້ຍົກກຳລັງໄປໂຈມຕີແກ້ແຄ້ນການກະທຳຂອງເຜົ່າໄທຂາວ. ໃນເດືອນທັນວາ (December) 1949 ເຈົ້າໜ້າທີ່ຝຣັ່ງເສສໄດ້ອອກຄຳສັ່ງ ຍົກຍ້າຍຄອບຄົວເຜົ່າມົ້ງ ໄປຕັ້ງຖິ່ນຖານໃໝ່ຢູ່ເມືອງຂວາ, ແຂວງຜົ້ງສາລີ, ພຣະຣາຊອານາຈັກລາວ ເພື່ອຕຽມກຳລັງເຂົ້າໄປຊ່ວຍ ຝຣັ່ງເສສໃນການຕໍ່ສູ້ກັບວຽດມິນ. ຢູ່ຄ້າຍທະຫານຝຣັ່ງເສສເມືອງຂວາ ແມ່ນທ່ານ ຣ.ອ. ວີໂກສເຊີ (Capt. Vigauche) ເປັນຜູ້ບັງຄັບບັນຊາ.

ໃນທ້າຍປີ 1950, ທາງຣາຊການຝຣັ່ງເສສໄດ້ສົ່ງທ່ານ ວ່າງຈົງ ແລະທະຫານເຜົ່າມົ້ງ ຈຳນວນຫລາຍ ຄົນໄປຝຶກວິຊາທະຫານ ປະມານສອງເດືອນ ແລ້ວໄດ້ຕິດອາວຸທຄົບມືກັບຄືນມາ. ທ່ານວ່າງຈົງ ໄດ້ຕິດ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຊັ້ນເປັນຈ່າເອກ ພ້ອມຖືກແຕ່ງຕັ້ງເປັນຜູ້ບັງຄັບບັນຊາກອງຮ້ອຍເຜົ່າມົ້ງ ແລະໄດ້ຖືກຍົກຍ້າຍໄປປະຈຳຢູ່ບ້ານອານ, ເມືອງງອຍ ໄກ້ຄ້າຍນ້ຳບາກ ໂດຽມີພາຣະກິດປ້ອງກັນບໍຣິເວນນ້ຳບາກ ແລະທາງທິດເໜືອຂອງປະເທສລາວ. ຈ່າເອກວ່າງຈິງ ເປັນນາຍທະຫາຣທີ່ມີຣະບຽບວິນັຍດີເລີດ, ມີຄວາມສາມາຖ ໃນການຕໍ່ສູ້ກັບສັດຕຣູໄດ້ດີຄື ທຳລາຍສັດຕຣູໄປຫລາຍຮ້ອຍຄົນ ພ້ອມທັງຍຶດອາວຸທປືນຂອງສັດຕຣູ ເປັນຈຳນວນຫລາຍສິບຄວນ. ທ່ານໄດ້ຮັບຄຳຍ້ອງຍໍຈາກກອງທັພຝຣັ່ງເສສຢູ່ທີ່ເມືອງຂວາ. ຍ້ອນຜົລປະຕິບັຕງານອັນດີເລີດຂອງທ່ານ ກອງທັພຝຣັ່ງເສສຈຶ່ງໄດ້ເລື່ອນຊັ້ນໃຫ້ທ່ານວ່າງຈິງ ຂຶ້ນເປັນນາຍຮ້ອຍໂທ ແລ້ວສົ່ງໃຫ້ໄປປະຈຳການຢູ່ຄ້າຍເມືອງຂວາ ເພື່ອທຳການກວາດລ້າງທະຫາຣວຽດມິນ ທີ່ອາໄສຢູ່ຕາມແຄມແມ່ນ້ຳອູ ໃນເຂຕຊາຍແດນຂອງຣາຊອານາຈັກລາວ.

ໃນເດືອນສິງຫາ (August) ປີ 1953, ຣ.ອ. ມາຊິງ (Capt. Mason) ໄດ້ເຊີນພຣະຍາຕູ້ບີ ລີຟຸງໄປຢ້ຽມຢາມ ຣ.ທ. ວ່າງຈິງ ແລະ ກຳລັງທະຫາຣທີ່ເມືອງໄຊຍ໌. ພ້ອມກັນນັ້ນ ຝຣັ່ງເສສໄດ້ສັນຍາຈະສົ່ງນາຍສາຍແລະນາຍໝໍ ໄປປະຈຳກຳລັງຂອງ ຣ.ທ. ວ່າງຈິງ ເພື່ອຕຽມເດີນທາງໄປໜູນຫລັງກຳລັງກອງທັພຝຣັ່ງເສສທີ່ສນາມຣົບດຽນບຽນຟູ. ຣ.ທ. ວ່າງຈິງໄດ້ຮັບທຸກຢ່າງຕາມຄຳໝັ້ນສັນຍາຂອງຝຣັ່ງເສສ. ຕົ້ນເດືອນກູມພາ (February) ປີ 1954 ທ່ານໄດ້ນຳພາກຳລັງທະຫາຣເຜົ່າມົ້ງ ໄປໜູນຫລັງສນາມຣົບດຽນບຽນຟູ. ການເຄື່ອນໄປຄັ້ງນີ້ ໄກ້ຈະເຖິງເປົ້າໝາຍຍັງປະມານ 30 ກິໂລແມຕຣ໌ ໄດ້ມີບັນຫາຫລາຍຢ່າງເກີດຂຶ້ນ ຄືມີການຕໍ່ສູ້ກັບວຽດມິນຢ່າງໜັກ ແລະຍິ່ງຫນັກຂຶ້ນໄປເລື້ອຍໆ ອາຫາຣກໍຈະໝົດ, ລູກກະສູນກໍຈະໝົດ, ໄດ້ສັ່ງໃຫ້ນາຍສາຍຕິດຕໍ່ກອງບັນຊາການ ທະຫາຣຝຣັ່ງເສສຢູ່ດຽນ ບຽນຟູ, ແຕ່ກໍບໍ່ໄດ້ຮັບຄຳຕອບປະການໃດ, ຍົນຕ໌ລຳລຽງ ກໍບໍ່ມີຈັກລຳ ເປັນຕອນສຸດທ້າຍຂອງເດືອນກູມພາເຫັນວ່າຢູ່ບໍ່ໄດ້ ຈຶ່ງໄດ້ຖອຍກັບປະມານ 40 ກິໂລແມຕຣ໌ ເພື່ອໄປລໍຖ້າເຄື່ອງບິນມາຖິ້ມເຄື່ອງ ແຕ່ໄດ້ຖືກສັດຕຣູໄລ່ຕິດຕາມໂຈມຕີ ເປັນຕົ້ນ ແມ່ນຍ້ອນຂາດລູກປືນ ທົນບໍ່ໄຫວ.

ກ່ອນ ຣ.ທ. ວ່າງຈິງຈະເຄື່ອນກຳລັງໄປໜູນຫລັງ ດຽນບຽນຟູ, ທ່ານໄດ້ສົ່ງທະຫາຣເຜົ່າມົ້ງປະມານ 30 ຄົນໄປຝຶກໂດດຈ້ອງຢູ່ທີ່ໄຊງ່ອນ (Saigon/Ho-Chi-Minh City) ວຽດນາມໃຕ້ ແຕ່ຍັງຮຽນໂດດຈ້ອງບໍ່ທັນຈົບ ຝຣັ່ງໄດ້ສົ່ງໄປໂດດຈ້ອງລົງທີ່ສນາມຣົບດຽນບຽນຟູ ທະຫາຣ 30 ຄົນດັ່ງກ່າວ ຖືກສັດຕຣູຍິງຕາຍຄາຈ້ອງ ບໍ່ເຫລືອຈັກຄົນ. ຍ້ອນກອງທະຫາຣວຽດມິນ ມີປືນຕໍ່ສູ້ທາງອາກາສຢ່າງດີ ໃນສົງຄາມດຽນບຽນຟູ ເຮັດໃຫ້ຍົນຕ໌ຂອງຝຣັ່ງເສສຫລາຍ ລຳຖືກຍິງຕົກ. ຫລັງຈາກເສັຍສົງຄາມດຽນບຽນຟູ ປະຊາຊົນຊາວເຜົ່າມົ້ງ ພາຄເໜືອຂອງປະເທສວຽດນາມ ຫລາຍພັນຄົນ ໄດ້ອົພະຍົບເຂົ້າໄປຢູ່ລາວ ຫລືຝັ່ງປະເທສໄທ໌ຍ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 20</u>. ທະຫານທ່ານ ຣ.ທ. ວ່າງຈີງ ກຳລັງບິນໄປໂດດຈອັງໃສ່ດຽນບຽນຝູ (ເສັຍຊີວິດໝົດທຸກຄົນ)*

ນາຍທະຫາຣຝຣັ່ງເສສທີ່ມາຕໍ່ສູ້ສົງຄາມຢູ່ແຖວດຽນບຽນຝູ ວຽດນາມເໜືອ ເຣີ່ມແຕ່ປີ 1937 ມີ ຣ.ຕ. ນາວາ, ຣ.ຕ. ບີແຊນ, ພ.ຕ. ອິມ ແຟລດ໌, ພ.ຕ. ເດີລີງ, ແລະ ພ.ຕ. ຊາລັອງ. ພວກທີ່ມາກ່ອນນັ້ນມີຫລາຍຄົນແຕ່ບໍ່ຮູ້ຊື່. ນາຍທະຫາຣຝຣັ່ງເສສ ທີ່ໄດ້ປະຈຳຢູ່ແຖວຜົ້ງສາລີ ເມືອງລາວ ຕອນ ຣ.ທ ວ່າງຈີງມາຢູ່ນຳ ມີ ຣ.ທ. ວາລີ, ຣ.ອ. ວິໂກສເຊີ, ພ.ຕ. ຝວກນີເອ, ຣ.ອ. ມາຊົງ ແລະ ນາຍພົນເຣີເນໂກຍີ (ຊຶ່ງເປັນຜູ້ຂຽນຊື່ນາຍທະຫາຣຝຣັ່ງ ນີ້ໄວ້ໃຫ້ ຣ.ທ. ວ່າງຈີງ). ໃນເວລາຕໍ່ສູ້ຢູ່ພາຄເໜືອຂອງປະເທສລາວ, ທ່ານ ຣ.ທ. ວ່າງຈີງໄດ້ຮັບຄວາມຍອັງຍໍສັນລະເສີນຈາກກອງທັພຝຣັ່ງເສສ ແລະພຣະເຈົ້າມະຫາຊີວິຕສີສຫວ່າງວົງສ. ທ່ານຈຶ່ງໄດ້ຕັດສິນໃຈ ເປັນອົພະຍົບມາຢູ່ໃນຣາຊອານາຈັກລາວໃນ ປີ 1955.

ນີ້ແມ່ນການບັນທືກຂອງ ພ.ຕ. ໜາວຈື້ ວ່າງ ຜູ້ເປັນລູກຊາຍຂອງ ຣ.ທ. ວ່າງຈີງ, ທີ່ໄດ້ອົພະຍົບມາຢູ່ລາວແລະໄດ້ຕໍ່ສູ້ສົງຄາມ 1960-1975 ຮ່ວມກັບທ່ານນາຍພົນ ວ່າງປາວ ແລະສະຫະຣັຖ. ທ່ານເລົ່າຕໍໄປວ່າ, ພໍ່ແລະພໍ່ອາວ ເລັ່ງຫວາ ວ່າງ ເລົ່າສູ່ລູກຫລານຟັງ ດັ່ງນີ້: ສົງຄາມດຽນບຽນຝູ ເປັນສົງຄາມທັນສມັຍໃຊ້ຍົນຕ໌ ໃຊ້ອາວຸດ ທີ່ພວກເຮົາບໍ່ເຄີຍເຫັນມາແຕ່ກ່ອນ ເປັນເຫຕການທີ່ໜ້າຢ້ານກົວແທ້ໆ. ສົງຄາມນີ້ໄດ້ເຮັດໃຫ້ປະຊາຊົນອົພຍົບໜີຫລາຍກວ່າ 40 ພັນຄົນມາຢູ່ລາວ ແລະຂ້າມໄປຍັງຝັ່ງປະເທສໄທ໌ຍ ໃນສມັຍ 1954.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 21</u>. ນາຍທະຫານຄົນສຳຄັນຂອງເຜົ່າໄທຂາວທີ່ໄດ້ຕໍ່ສູ້ຮ່ວມກັບຝຣັ່ງເສສໃນສມັຍ 1950-1954 ໄດ້ອົພະຍົບ ມາຢູ່ລາວໃນແຂວງຊຽງຂວາງ (ລາດຮ້ວງ) ຈາກຊ້າຍຫາຂວາ ທ່ານ ຣ.ທ. ຫງຽນດິ່ນເຕີນ ໄດ້ເສັຍຊີວິດຢູ່ຕູ່ນຝຣັ່ງເສສ (Toul, France); ຣ.ທ. ຜາມວັນເຢືອງໄດ້ອົພະຍົບຈາກລາວໄປຢູ່ແມສ (Metz, France) ແລະເສັຍຊີວິດຢູ່ທີ່ນັ້ນໃນປີ 1980 ຜູ້ທີ່ສາມບໍ່ຮູ້ຊື່. ອົພະຍົບເຜົ່າຕ່າງໆຈາກວຽດນາມເໜືອ ໄດ້ເຂົ້າມາຕັ້ງຖິ່ນຖານຢູ່ລາວຫລາຍພັນຄົນ ຕາມແຂວງດັ່ງນີ້ຄື: ແຂວງຊຽງຂວາງ; ແຂວງໄຊຍະບຸຣີ; ແຂວງວຽງຈັນ ແລະ ແຂວງສະວັນນະເຂດ.*

ໃນທ້າຍປີ 1955, ຝຣັ່ງໄດ້ຖອຍອອກຈາກອິນດູຈີນທັງໝົດ ຕາມສັນຍາເຊີແນວ. ສ່ວນວຽດມິນນັ້ນ ຍັງຄົງຢູ່ໃນເຂດແດນຂອງລາວຕໍ່ໄປ ຍຶດເອົາດິນລາວເປັນທາງຜ່ານ ແລະເປັນບ່ອນລີ້ຊ່ອນ ກອງທັພວຽດມິນເພື່ອຕຽມກຳລັງລົງໄປລຸກລານວຽດນາມໃຕ້ ຈຸດປະສົງແມ່ນດຶງວຽດນາມທັງສອງ ມາເປັນວຽດນາມດຽວ. ດ້ວຍເຫດດັ່ງກ່າວ ຈຶ່ງເກີດສົງຄາມສະຫະຣັຖ-ວຽດນາມ (US-Vietnam War) ໃນປີ 1959-1975. ເລີ່ມແຕ່ປີ 1955 ສະຫະຣັຖໄດ້ສົ່ງຜູ້ສັງເກດການຫລາຍຄົນ ເຂົ້າໄປໃຫ້ການຊ່ວຍເຫລືອຢູ່ໃນພຣະຣາຊອານາຈັກລາວ. ຜູ້ສັງເກດການໃນແຂວງຊຽງຂວາງ ຄົນອາເມຣິກັນຜູ້ທຳອິດແມ່ນທ່ານພັບບົວ (Pop Buell, USAID.)

ໃນປີ 1947, ພຣະຍາຕູ້ບີ ລີຟຸງໄດ້ຮັບກຽດຖືກແຕ່ງຕັ້ງເປັນເຈົ້າເມືອງເຜົ່າມົ້ງ ຄົນທຳອິດຂອງແຂວງຊຽງຂວາງ ແລະ ທ່ານຈົງຕົວມົວໄດ້ຮັບກຽດຖືກແຕ່ງຕັ້ງເປັນນາຍກອງເຜົ່າມົ້ງຄົນທຳອິດ ຮັບຜິດຊອບໃນບໍຣິເວນພູດູ່, ແຂວງຊຽງຂວາງ. ໃນປີດຽວກັນນີ້ ທ່ານຕູ້ເລັ້ຍ ລີຟຸງ ໄດ້ຖືກເລືອກຕັ້ງເປັນຜູ້ແທນຣາຊດອນແຂວງຊຽງຂວາງ. ທ່ານເປັນຄົນແຣກຂອງເຜົ່າມົ້ງ ທີ່ໄດ້ເປັນຜູ້ແທນຣາຊດອນແຂວງຊຽງຂວາງ. ໃນວັນທີ່ 11 ເດືອນພຶດສະພາ (May) ປີ 1947 ທ່ານຕູ້ເລັ້ຍ ລີຟຸງ ໄດ້ເຂົ້ານັ່ງໃນສະພາຜູ້ແທນຣາຊດອນທີ່ນະຄອນວຽງຈັນທນ໌. ທ່ານໄດ້ສເນີຍັດຕິກົດໝາຍກ່ຽວກັບການໃຊ້ສິດເທົ່າທຽມກັນ ຣະຫວ່າງທຸກໆຊົນຊາດ ຊົນເຜົ່າ ທີ່ຢູ່ພາຍໃນພຣະຣາຊອານາຈັກລາວ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



ຮູບທີ່ 22. ທ່ານພັບບີວ ຫົວໜ້າຢູເສດ ກຳລັງເບິ່ງເດັກທີ່ມີອາການເຈັບໜັກຢູ່ແຂວງຊຽງຂວາງໃນປີ 1960.







<u>*ຮູບທີ່ 23*</u>*. ປືນເພີງຊາວເຜົ່າໄທດຳສໄມແຕ່ກ່ອນ*

<u>*ຮູບທີ່ 24*</u>*. ນາງສາວໄທຂາວກຳລັງໄປເບິ່ງໂຄກ ໃຊ້ນ້ຳຕຳເຂົ້າ.*

ໃນຣະຫວ່າງ 1949-1958, ທ່ານພະຍາຕູ້ບີ ລີຝຸງດຳຣົງຕຳແໜ່ງເປັນຮອງເຈົ້າແຂວງຊຽງຂວາງ. ຕອນນີ້ ປະຊາຊົນເຜົ່າມົ້ງຢູ່ຕາມຫົວເມືອງຕ່າງໆ ໄດ້ຮັບການສຶກສາປະມານ 20 ເປີເຊັນ (20%). ທ່ານຢື້ວ ປາວຢາງ ໄດ້ຖືກເລື່ອນຕຳແໜ່ງຂຶ້ນເປັນຮອງເຈົ້າແຂວງຊຽງຂວາງ ສຳຫລັບຊຸມຊົນເຜົ່າມົ້ງ ແທນພຣະຍາ ຕູ້ບີ ລີຝຸງ ແລະ ທ່ານເຈັ່ຍຊ້າງມົວ ໄດ້ຖືກເລື່ອນຕຳແໜ່ງຂຶ້ນເປັນເຈົ້າເມືອງຊູມຊົນເຜົ່າມົ້ງ ແທນທ່ານຢື້ວປາວຢາງ. ໃນປີ1949 ພຣະຍາ ຕູ້ບີ ຕັດສິນໃຈເລືອກເອົາຢື້ວປາວຢາງ ມາເປັນເຈົ້າເມືອງມົ້ງແທນທ່ານ ຈຶ່ງພາໃຫ້ທ່ານບີຈູລໍ ບໍ່ພໍໃຈ ເລີຍໄດ້ໂຕນໜີໄປລ່ວມມືກັບພວກລາວອິສຣະ ແຕ່ບໍດົນ ໃນປີ 1955 ກໍ່ຍັງກັບຄືນມາ ຮ່ວມມືກັບພຣະຍາຕູ້ບີ ອີກ. ໃນປີ 1961 ຕອນກອງແລເຂົ້າມາຍຶດເອົາຊຽງຂວາງ ທ່ານບີຈູລໍ ຊ້ຳ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພັດ ໜີໄປຢູ່ນໍາກອງແລ ແລະໃນປີ1963 ກໍ່ຖືກທະຫານກອງແລຂ້າຕາຍ ໂດຍບໍ່ຮູ້ຈັກວ່າຍ້ອນເຫັດຜົນແນວໃດ.

ໃນເດືອນ ມິຖຸນາ ວັນທີ່ June 17, 1958, ພຣະຍາຕູ້ບີ ລີຟຸງ ໄດ້ຖືກເລືອກຕັ້ງເປັນຜູ້ແທນຣາສດອນແຂວງຊຽງຂວາງ ເປັນຊຸດສມັຍການເລືອກຕັ້ງເພີ່ມເຕີມ ຮ່ວມກັບພັຄແນວລາວຮັກຊາຕ. ເພາະສນັ້ນທ່ານພຣະຍາ ຈຶ່ງໄດ້ຍົກຍ້າຍໄປຢູ່ນະຄອນວຽງຈັນທນ໌

ໃນປີ 1949, ພຣະຍາຕຸລາປະສິທ ຕູ້ເຢີລີຟຸງ (ເຊີນອ່ານໜ້າຊີວະປຣາວັຕ) ໄດ້ແຕ່ງງານກັບນາງ ສີສະໝອນ ທັມະວົງ ລູກສາວຂອງຍາພໍ່ ທິບ ທັມະວົງ ຜູ້ທີ່ໄດ້ຊ່ອຍທ່ານນາຍພົນວ່າງປາວ ສ້າງ ແລະ ກຳກັບສະຖານີວິທະຍຸກະຈາຍສຽງ ຖແລງຂ່າວ ລາວຮ່ວມເຜົ່າ ຢູ່ທີ່ລ່ອງແຈ້ງ ເຂຕທະຫາຣພາຄ 2 ໃນພຣະຣາຊອານາຈັກລາວ. ຍາພໍ່ທິບໄດ້ອົພະຍົບໄປຢູ່ການາດາ ແລະເສັຍຊີວິດຢູ່ທີ່ນັ້ນ. ໃນປີ 1975 ທ່ານຕູ້ເຢີລີຟຸງ ແລະຄອບຄົວ ໄດ້ອົພະຍົບໄປປະເທສຝຣັ່ງເສສ. ໃນປີ 1992 ທ່ານໄດ້ຍ້າຍມາຢູ່ສະຫະຣັຖ ແລະໄດ້ເສັຍຊີວິດຢູ່ສະຫະຣັຖ ໃນວັນທີ່ 10 ເດືອນກູມພາ (February) ປີ 2004 ດ້ວຍໂລກຊະຣາ.





*<u>ຮູບທີ່ 25.</u> ພຣະຍາ ຕຸລາປຣະສິທ ຕູ້ເຢີ ລີຟຸງ* *<u>ຮູບທີ່ 26</u>. ທ່ານຕູ້ເຢີ ລີຟຸງ ແລະພັລຍາ ນາງສີສະໝອນ*

ໃນຣະຫວ່າງປີ 1750-1958, ປະຊາຊົນເຜົ່າມົ້ງໄດ້ມາຕັ້ງຖິ່ນຖານຢູ່ໃນພຣະຣາຊອານາຈັກລາວ ມີປະມານຫົກແສນຄົນ (600,000) ຢູ່ຕາມພາຄເໜືອຂອງລາວ, ຄື: ແຂວງຜົ້ງສາລີ, ຫລວງນ້ຳທາ (ຕອນນັ້ນ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແຂວງບໍ່ແກ້ວ, ແຂວງອຸດົມໄຊ໌ຍ ຍັງບໍ່ເປັນແຂວງ ຍັງຢູ່ໃນແຂວງ ຫລວງນ້ຳທາ), ແຂວງຫລວງພຣະບາງ, ແຂວງໄຊຍະບຸຣີ, ແຂວງຫົວພັນ, ແຂວງຊຽງຂວາງ, ແລະ ແຂວງ ວຽງຈັນທນ໌. (ຕອນນັ້ນ ແຂວງ ບໍຣິຄຳໄຊ໌ຍ ຍັງບໍ່ເປັນແຂວງ ຍັງຢູ່ໃນແຂວງ ວຽງຈັນ ແລະ ແຂວງຄຳມ່ວນ). ຫລັງຈາກມີການປ່ຽນ ຣະບອບການເມືອງໃນລາວ ໃນປີ 1975 ເມືອງລາວຈຶ່ງໄດ້ແບ່ງເປັນ 17 ແຂວງ ລວມທັງເຂດເທສບານ ນະຄອນວຽງຈັນ). ສຳລັບແຂວງຊຽງຂວາງ ຕາມການສຳຣວດຂອງຢູເສດໃນປີ 1973 ໂດຽສະເພາະ ຢູ່ເຂຕເຂຕປົກຄອງຂອງຝ່າຍ ພຣະຣາຊອານາຈັກລາວ ມີປະຊາຊົນເຜົ່າມົ້ງ ບໍ່ຕ່ຳກວ່າ 400 ພັນ (400,000) ຄົນ.

ໃນວັນທີ່ 27 ເດືອນສິງຫາ (August) ປີ 1946, ພຣະຣາຊອານາຈັກລາວໄດ້ຮັບເອກກະຣາຊຈາກ ຝຣັ່ງເສສ, ແຕ່ຍັງຢູ່ໃນເຄືອສະຫະພັນຂອງຝຣັ່ງເສສ ຕາມ” Modus Vivendis.” ໃນວັນທີ່ 19 ເດືອນ ກໍຣະກະດາ (July) ປີ 1949, ຝຣັ່ງເສສໄດ້ຕົກລົງມອບເອກກະຣາຊອັນສົມບູນ ໃຫ້ພຣະເຈົ້າມະຫາຊີວິດ ສີສະຫວ່າງວົງສ໌ ກະສັຕຍ໌ຂອງລາວ, ຢູ່ໃນການຄູ້ມຄອງຂອງຝຣັ່ງເສສ ໃນດ້ານການເງີນແລະດ້ານ ການ ປ້ອງກັນຄວາມປອດພັຍ ກັບປະເທສໄກ້ຄຽງ.



*<u>ຮູບທີ່ 27</u>. ໃນວັນທີ່ 19 ເດືອນ ກໍລະກະດາ (July) 1949 ເຈົ້າຊີວິດລາວ ສະເດັຈເຈົ້າສີສະຫວ່າງວົງຄ໌ ໄດ້ເຊັນຮັບເອົາເອກກະຣາຊ ຮ່ວມກັບທ່ານປະທານາທິບໍດີ ຝຣັ່ງເສສ ທ່ານແວນຊານ ໂອຣິໂອ (Vincent Auriol) ແຕ່ໃຫ້ຢູ່ໃນສະຫະພັນ ຝຣັ່ງເສສ ເພື່ອປ້ອງກັນການລຸກລານ ຈາກປະເທສໄກ້ຄຽງທີ່ເຄີຍລຸກລານປະເທສລາວເປັນທົວເມືອງຂື້ນຜ່ານມາແລ້ວ.*

ໃນປີ 1949 ການປ່ຽນແປງດ້ານການເມືອງ ແລະການປົກຄອງ ຫລັງຈາກສົງຄາມໂລກຄັ້ງທີ່ສອງ ໄດ້ ສິ້ນສຸດລົງ ກໍເກີດສົງຄາມຣະຫວ່າງໂລກເສຣີປະຊາທິປະໄຕ ແລະໂລກສັງຄົມນິຍົມຄອມມຸຍນິສຕ໌. ການເມືອງແບບໃໝ່ ໄດ້ລະເບີດຂື້ນ ເຮັດໃຫ້ໂລກນີ້ແບ່ງເປັນສອງຣະບອບການປົກຄອງ (ສອງຄ້າຍ) ຄື: ຄ້າຍໂລກຕາວັນຕົກ “ເສຣີປະຊາທິປະໄຕ” ແລະ ຄ້າຍໂລກຕາວັນອອກ ສັງຄົມນິຍົມຄອມມຸຍນິສຕ໌. ທ່ານໄຮຈິມິນ ໄດ້ມີໂອກາສເລືອກເຂົ້າຮ່ວມ ເປັນເຄືອຂ່າຍຂອງໂລກສັງຄົມນິຍົມຄອມມຸຍນິສຕເຣີ່ມແຕ່ ປີ1950 ເພາະຕ້ອງການສນັບສນູນ ແລະການຊ່ວຍເຫລືອທາງດ້ານອຸປະກອນສົງຄາມ ຈາກໝູ່ປະເທສສັງ ຄົມນິ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຍົມຄອມມຸຍນິສຕ໌, ເພື່ອເອົາໄປທຳສົງຄາມຕໍ່ສູ້ຂັບໄລ່ກອງທັພຝຣັ່ງເສສ ອອກຈາກປະເທສວຽດ ນາມ ແລະ ອິນດູຈີນ ທັງໝົດ.

ໃນປີ 1951, ຈີນ ຄ.ມ.ນ.ໄດ້ອານຸຍາຕໃຫ້ໂຮຈິມິນ ເຕົ້າໂຮມກຳລັງຮົບຂອງຕົນຢູ່ຕາມຊາຍແດນຈີນ-ວຽດ ນາມ ແລະ ວຽດນາມ-ລາວ ເພື່ອຝຶກຕຽມກຳລັງ ຕໍ່ສູ້ກັບກອງທັພຂອງຝຣັ່ງເສສ ໄດ້ທຸກໂອກາສ. ໃນປີ 1952, ຝຣັ່ງເສສໄດ້ຮູ້ຂ່າວການເຄື່ອໄຫວຂອງໂຮຈິມິນນີ້ດີ ຈຶ່ງໄດ້ຂໍຄວາມຮ່ວມມືຊ່ວຍເຫລືອ ແລະ ການ ສນັບສນູນຈາກສະຫະຣັຖ ເພື່ອຕຽມປ້ອງກັນການບຸກໂຈມຕີຈາກກອງທະຫາຣຂອງໂຮຈິມິນ. ເພາະສະ ນັ້ນ ຝຣັ່ງເສສຈຶ່ງໄດ້ສ້າງຖານທັພໃສ່ດຽນບຽນຝູ ຢູ່ວຽດນາມເໜືອ, ຢູ່ທົ່ງໄຫຫີນ ແຂວງຊຽງຂວາງ, ຢູ່ ຊຽງ ເງິນ ແຂວງຫລວງພຣະບາງ, ແລະ ຢູ່ເຊໂນ ແຂວງສວັນນະເຂຕ ໃນຣາຊອານາຈັກລາວ ເພື່ອຕຽມ ສູ້ກັບ ກອງທະຫານ ຂອງໂຮຈິມິນ.

ໃນເດືອນທັນວາ (December) ປີ 1952, ໂຮຈິມິນຍົກກອງພົນ 312 ເຂົ້າໂຈມຕີປະເທສລາວຄັ້ງທີ່ໜຶ່ງ ຄື: ຕີຕັດຫລັງກອງທະຫາຣຝຣັ່ງເສສ ຢູ່ແຂວງຫົວພັນ (ຊຳເໜືອ), ແລະ ແຂວງຜົ້ງສາລີ ໂດຍອ້າງເຫຕຜົລ ວ່າ  ປົດປ່ອຍເຂຕດັ່ງກ່າວ ເພື່ອເອົາມາເປັນທີ່ຕັ້ງຂອງພັຄລາວອິສສຣະ. ພ້ອມກັນນັ້ນ ວຽດມິນໄດ້ສົ່ງ ກຳລັງທະຫານສອງກຣົມ ເຂົ້າໂຈມຕີແຂວງຊຽງຂວາງດັ່ງນີ້:

- ກຣົມ 148 ເຄື່ອນໄປຈາກຊຳເໜືອ ເພື່ອຈົມຕີບ້ານບານ ແຂວງຊຽງຂວາງ
- ກຣົມ 195 ວຽດມິນ ປະສົມມົ້ງລໍ, ເຄື່ອນໄປຈາກເມືອງແສນ ວຽດນາມກາງ ເພື່ອໂຈມຕີ ໜອງແຮດ, ຊຽງຂວາງ ໂດຍອ້າງວ່າ ຈະໂຈມຕີໜອງແຮດ ເພື່ອຍຶດເອົາເປັນທີ່ຕັ້ງຂອງຝ່າຍມົ້ງລໍ. ກຣົມ 195 ນີ້ ຝ່າຍມົ້ງລໍ ໄດ້ກວດລ້າງຄອບຄົວ ລູກເມັຍຝ່າຍມົ້ງລີ ແລະ ບາງຄອບຄົວເຜົ່າລາວ ທີ່ສນັບສນຸນຝ່າຍຝຣັ່ງເສສ ເອົາໄປກັກຂັງໄວ້ທີ່ເມືອງແສນ ປະເທສວຽດນາມ. ດ້ວຍເຫຕການ ດັ່ງກ່າວ ຈຶ່ງໄດ້ສ້າງຄວາມແຕກແຍກ ລະຫວ່າງຊຸມຊົນຊາວເຜົ່າມົ້ງ ອອກເປັນສອງຝ່າຍໜັກຂຶ້ນ ນັບຕັ້ງແຕ່ເວລານັ້ນເປັນຕົ້ນມາ.(ເວລານີ້ ຝ່າຍມົ້ງທີ່ຮ່ວມກັບຝຣັ່ງ ໄດ້ອົພະຍົບມາຢູ່ ລາດຮ້ວງ, ດົງດ່ານ ແລະ ໃນເມືອງຊຽຂວາງ ຈົນໝົດ ໜອງແຮດ ຈຶ່ງເປັນທີ່ຕັ້ງຂອງມົ້ງ ລໍ ຈົນເຖິງ 1954.)

ວຽດມິນໄດ້ຍົກກອງພົນ 308 ເຄື່ອນລົງໄປພາຄໃຕ້ຂອງຣາຊອານາຈັກລາວ ໄດ້ກວດລ້າງກຳລັງທະຫານ ຝຣັ່ງເສສໃນແຂວງສວັນນະເຂຕ, ແຂວງສາຣະວັນ ເພື່ອຍຶດປ່າດົງ ແລະ ພູເຂົາໃນເມືອງລາວ ໃຊ້ເປັນ ຖານ ທັພ, ເປັນສະຖານທີ່ຝຶກຊ້ອມກຳລັງ ວຽດກົງ ຂອງວຽດນາມໃຕ້ ເພື່ອຕຽມໂຈມຕີ ວຽດນາມໃຕ້ ໃນ ຂັ້ນ ຕໍ່ໄປ.

ໃນວັນທີ່ 13 ຫາ 15 ເດືອນສິງຫາ (August) ປີ 1950, ເຈົ້າສຸພານຸວົງສ໌ໄດ້ປະກາສເຂົ້າຮ່ວມເປັນ ສະມາ ຊິກຂອງ ພັຄຄອມມຸຍນິສຕ໌ ອິນດູຈີນ (ພັຄວຽດມິນ) ເພື່ອເປັນສາຍສນວນ ຊັກຈູງເອົາວຽດມິນເຂົ້າ ຮ່ວມ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ການຕໍ່ສູ້ຢູ່ໃນລາວ. ເຈົ້າສຸພານຸວົງສ໌ຈຶ່ງໄດ້ກັບກາຍເປັນມ້າໄມ້ ເຊື່ອງຂີ່ນ ຄົນວຽດມິນເຂົ້າລາວ. ດັ່ງ ຕົວຢ່າງ ໃນວັນທີ່ 20 ເດືອນ ສິງຫາ (August) ປີ 1953 ລາວອິສສຣະໄດ້ປະກາສການຈັດຕັ້ງຂຶ້ນຢູ່ຕົວເມືອງຊຳເໜືອ, ເພື່ອຕໍ່ຕ້ານຝຣັ່ງເສສ ແລະ ຝ່າຍຣັຖບາລ ວຽງຈັນທນ໌.

ໃນວັນທີ່ 12 ເດືອນເມສາ (April) ປີ 1953, ວຽດມິນ ໄດ້ສົ່ງກຳລັງບຸກໂຈມຕີ ຣາຊອານາຈັກລາວ ເປັນຄັ້ງທີ່ສອງດັ່ງຕໍ່ໄປນີ້:

- ກອງພົນ 312 ບຸກໂຈມຕີແຂວງຫລວງພຣະບາງ ເພື່ອທຳລາຍເດີນຍົນຕ໌ຊຽງເງິນ.
- ກອງພົນ 304, 306 ບຸກໂຈມຕີແຂວງຊຽງຂວາງ ແລະແຂວງຫົວພັນເພື່ອ ທຳລາຍເດີນຍົນຕ໌ທົ່ງໄຫຫີນ.
- ກອງພົນ 308 ເຂົ້າບຸກໂຈມຕີແຂວງສວັນນະເຂຕ ແລະແຂວງສາຣະວັນ ເພື່ອທຳລາຍເດີນຍົນຕ໌ເຊໂນ.

ກອງທະຫາຣວຽດມິນທີ່ກ່າວເທິງນີ້ ໄດ້ບຸກໂຈມຕີທົ່ວທຸກແຂວງໃນປະເທສລາວ ພ້ອມໆກັນ ແຕ່ກອງທັພຂອງຝຣັ່ງເສສໃນທຸກແຫ່ງ ບໍ່ໄດ້ຮັບການເສັຍຫາຍຫນັກເທົ່າໃດ. ວຽດມິນໄປໂຈມຕີຄັ້ງນີ້ ແມ່ນເພື່ອຂູ່ຂວັນກຳລັງໃຈຂອງກອງທັພຝຣັ່ງເສສ, ກອງທັພວຽດນາມໃຕ້, ແລະພຣະຣາຊອານາຈັກລາວ. ແມ່ນແຜນວາງໜ່ວຍດັດສະກັດກອງກຳລັງຂອງຝຣັ່ງເສສ ທີ່ຈະສົ່ງໄປໜູນຫລັງສນາມຣົບດຽນບຽນຟູ. ກອງທະຫາຣຝຣັ່ງເສສຕ້ອງໄດ້ທຳການກວດລ້າງທະຫາຣວຽດ ມິນແຕ່ລະຈຸດ ໃຫ້ອອກຫ່າງຈາກເດີນຍົນຕ໌ຕ່າງໆ ເພື່ອຄວາມປອດພັຍ ຂອງເດີ່ນຍົນຕ໌ນັ້ນໆ. ຝຣັ່ງໄດ້ສົ່ງກຳລັງທະຫາຣອອກກວດລ້າງ ຕາມເສັ້ນທາງ ຈາກຊຽງຂວາງໄປຫາດຽນບຽນຟູ; ເສັ້ນທາງຈາກຫລວງພຣະບາງ ໄປຫາແຂວງຫົວພັນ ແລ້ວໄປຫາດຽນບຽນຟູ, ເສັ້ນທາງຈາກຫລວງພຣະບາງ ໄປຫາຜົ້ງສາລີ (ສາຍນີ້ໄປເຖິງນ້ຳບັກ). ຍ້ອນວ່າດຽນບຽນຟູ ໄດ້ຕົກໃຫ້ ຄ.ມ.ນ. ກ່ອນກຳນົດ ສາຍທາງເສັ້ນນີ້ ຈຶ່ງໄດ້ໄປຕັ້ງທີ່ໝັ້ນຢູ່ໃນບໍຣິເວນນ້ຳບັກ.

ທ່ານນວນດຳ ອິນທິວົງສ໌ ອາດີດຂ້າຣາຊການປະຈຳຢູ່ແຂວງຫົວພັນຂຽນວ່າ: "ເນື່ອງຈາກຄ້າຍທະຫາຣຝຣັ່ງທີ່ດຽນບຽນຟູ ຖືກຄຸກຄາມຢ່າງຫນັກ ຜູ້ນຳຝ່າຍຝຣັ່ງຈຶ່ງໄດ້ສັ່ງໃຫ້ກຳລັງທະຫາຣ, ຂ້າຣາຊການ ທີ່ຢູ່ຊຳເໜືອ ຍ້າຍໄປຫາທີ່ປອດພັຍໃນທົ່ງໄຫຫີນ. ທຸກຄົນໄດ້ໜີມາເຖິງພູຫຽງຄາຍ ແຕ່ສັດຕຣູນຳທັນ ແລ້ວກໍ່ຖືກຈັບຢູ່ທີ່ບ້ານນາເມືອງ. ສັດຕຣູໄດ້ຄູມທັງໝົດໄປຂັງໄວ້ພູຫ່ຽງຄາຍ ເກືອບເຖິງ 5 ເດືອນ ແລ້ວພວກລາວແດງ ຄ.ມ.ນ. ແລະແກວໄດ້ຕັ້ງສານປະຊາຊົນຂຶ້ນ ເພື່ອຕັດສິນຜູ້ຕ້ອງຫາດັ່ງຕໍ່ໄປນີ້: ໃນວັນທີ່ 14, ເດືອນ ເມສາ( April)ປີ 1953 <u>ຕັດສິນຄັ້ງທີ່ໜຶ່ງ</u> ຢູ່ປ່າຊ້າເມືອງປົວ ໃຫ້ປະຫາຣຊີວິດຜູ້ນຳ ທີ່ມີຊື່ດັ່ງຕໍ່ໄປນີ້ຄື:

1-ທ່ານຄຳປານ ບຸນຍາຣິດ ເຈົ້າແຂວງຫົວພັນ;

2-ທ່ານຊຽງຄຳມີ ເຈົ້າເມືອງໆຊຽງຄໍ້;

3-ທ່ານພົມມະສີ ນາຍທະຫາຣບ້ານ ຊຳເໜືອ;



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

4-ນາຍບາບິວ ທະຫານຝຣັ່ງຢູ່ເມືອງບິວ;

5-ນາຍທະຫານລາວ ບາທອງ ທະຫານຝຣັ່ງ ແມ່ນຄົນລາດບອກ ແຂວງຊຽງຂວາງ.

ໃນວັນທີ່ 02 ເດືອນພຶສຈິກາ (November) ປີ 1953 ຕັດສິນຄັ້ງທີ່ສອງ ຢູ່ໃກ້ບ້ານຄັງແຄກ ເມືອງຊຳເໜືອ ໃຫ້ປະຫານຜູ້ມີຊື່ຄື:

1-ທ່ານຊຽງກັນຍາ ບູນລືໄຕ ເຈົ້າເມືອງຊຳໃຕ້;

2-ຊຽງທູນ ບູນລືໄຕ ຜູ້ລອງເຈົ້າເມືອງຊຳໃຕ້;

3- ຣ.ທ. ຄຳຜີວ ທະຫານຝຣັ່ງປະຈຳເມືອງຊຽງຄໍ້;

4- ທ່ານບ່າວ ບົວເທັນ ອິນທະວົງສ໌ ຕາແສງເມືອງປາວ ເມືອງຊຳໃຕ້;

5-ນາຍຈັນທາ ທະຫານປະຈຳບ້ານ ຢູ່ເມືອງພັດເມືອງຊຳໃຕ້;

6- ສິບເອກຊຽງຍາ ທະຫານຝຣັ່ງຢູ່ບ້ານເຕົ່າ ເມືອງຊຳໃຕ້.

ໃນວັນທີ່ 06 ເດືອນພຶສຈິກາ (November) ປີ 1953 ຕັດສິນຄັ້ງທີ່ສາມ ຢູທີ່ບ້ານແກ່ງລິດ ເມືອງກາງ ເມືອງໂສຽ ແຂວງຫົວພັນຄື:

1- ທ່ານບາແທງ ນາຍກອງເມືອງໂສຍ;

2- ທ່ານບາເທີ ເຈົ້າເມືອງໄກາຍາ (ພໍ່ຂອງ ພ.ອ. ຄຳໄຕ ສໍພາບມີໄຊ);

3- ຣ.ທ. ລໍ ຄຳດາວ ນາຍທະຫານຝຣັ່ງ ແມ່ນຜູ້ແປພາສາຝຣັ່ງ ຢູ່ກອງຮ້ອຍ 23 ກອງພັນທີ່ 8 ເປັນນ້ອງຊາຍ ທ່ານ ລໍຄຳທີ ໝໍ່ກາຍາ ທີ່ເຮັດວຽກນຳທ່ານນາຍພົນວ່າງປາວ ແລະ ເປັນອ້າຍຂອງ ລໍຄຳເດ່ (ຫລືທ່ານນອນດຳ ອິນທິວົງສ໌);

4-ທ່ານຄຳພາ ເປັນນາຍພົ້ງເມືອງກາງ ໃນເມືອງໂສຍ.

ຕັດສິນຄັ້ງ ທີ່ ສີ ແມ່ນຢູ່ປ່າ ບໍ່ຮູ້ຈຸດແລະວັນທີ່ດີຄື:

1-ທ່ານອຸດົມ ພິພັດ ເຈົ້າເມືອງໄປາກແຊງ;

2-ທ່ານເພັຍຄຳ ຕາແສງ ເມືອງຊອ່ນ ແຂວງ ຫົວພັນ;

3-ທ່ານເພັຽແກ້ວ ແມ່ນນາຍພົ້ງ ບ້ານສິບຊາຍ;

4-ທ່ານບາແຕນ ທະຫານຝຣັ່ງ ບ້ານຊຽງຄໍ້;

5-ທ່ານບາຕູບ ນາຍບ້ານໜອງກັ້ງງ;

6-ທ້າວຕັ້ງນ ຄູນພໍ່ ບາດຫລວງ ນັກບວດ ແຄ້ໂຕລິກ ປະຈຳຢູ່ເມືອງໂສຍ;

7-ທ່ານແດວວັນເປີງ ທະຫານຝຣັ່ງ ປະຈຳການຢູ່ເມືອງເຊີນລາ ເປັນເຜົ່າໄທດຳ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ທ່ານນວນດຳ ອິນທິວົງສ໌ ຍັງບັນທຶກໄວ້ອີກວ່າ ລາວແດງ ຄ.ມ.ນ. ແລະແກວ ໄດ້ປະຫານຊີວິດ ປະຊາຊົນແຂວງຫົວພັນ ຢ່າງລັບໆ ໄປຫລາຍພັນຄົນ ຈົນນັບບໍ່ຖ້ວນ. ເຂົາໃຊ້ທຸກຮູບແບບ ເພື່ອດັບສູນ ປະ ຊາຊົນລາວ ຢ່າງບໍ່ມີຄວາມເວັດທະ ນາປານີ, ບໍ່ມີມະນຸສທັມ ແລະຢ່າງປ່າເຖື່ອນທີ່ສຸດໃນໂລກ. ຈຸດປະສົງຄ໌ຂອງແກວ ກໍແມ່ນ "ຂ້າເຈົ້າ ເອົາຂອງ" ຄື "ເອົາແຜ່ນດິນລາວ". *[ທ່ານນວນດຳ ອິນທິວົງສ໌ ດຽວນີ້ມີສັນຊາດ ອາເມຣິກັນ ແລ້ວ. ຂໍຂອບໃຈນຳທ່ານຫລາຍໆ ທີ່ໄດ້ແບ່ງປັນຂໍ້ບັນທຶກໃຫ້ພວກເຮົາ ອ່ານ ນຳ]*.

ຫລັງຈາກກອງແລເຮັດຣັຖປະຫານ ສະຫະຣັຖຈຶ່ງໄດ້ເສີມຄ້າຍນໍ້າບັກ. ເລີ່ມແຕ່ໃນປີ 1962, ກອງທະຫານວຽດມິນແລະຈີນແດງ ໄດ້ໂຈມຕີຄ້າຍນີ້ຢ່າງຮູນແຮງ, ໄດ້ເຮັດໃຫ້ກອງທັພຂອງຣັຖບາລລາວ ເສັຍ ຫາຍຢ່າງຫນັກ ແລະເຮັດໃຫ້ສະຫະຣັຖ ເປັນຫວ່ງນຳສຖານະການໃນລາວຫລາຍຂຶ້ນ. ປະທານາທິບໍດີ ສະຫາຣັຖ ທ່ານໄອເຊນຮາວເວີ (Dwight D. Eisenhower) ທີ່ເຂົ້າຮັບໜ້າທີ່ໃນປີ 1953 ເຄີຍໄດ້ ກ່າວວ່າ: *"ຫາກເມືອງລາວຕົກ, ແມ່ນເປີດທົ່ນທາງໃຫ້ຄອມມູຍນິສຕ໌ ໄປສູ່ພາຄພື້ນເອເຊັຍຕາວັນອອກ ສ່ຽງໃຕ້ທັງໝົດ". ດັ່ງນັ້ນ ທ່ານແຄນເນດີຈຶ່ງໄດ້ຕັດສິນໃຈ ສົ່ງທະຫານໄປຕຽມຖານທັບ ປ້ອງກັນຣາຊ ອານາຈັກໄທ໌ຍ ໃນ 1962.* ອາດີດທະຫານໂດດຈ້ອງຜູ້ໜຶ່ງ ໄດ້ບັນທຶກເນື້ອເຣື່ອງຕໍ່ໄປນີ້ວ່າ ໃນທ້າຍ ເດືອນເມສາ (April) 1953, ຝຣັ່ງເສສ ໄດ້ສົ່ງທະຫານເຜົ່າລາວ ແລະ ເຜົ່າມົ້ງສອງກອງພັນ ໄປຝຶກໂດດ ຈ້ອງ. ກອງພັນລາວໄປຮຽນຢູ່ທີ່ເຊໂນ ແຂວງສວັນນະເຂດ, ແລະ ກອງພັນເຜົ່າມົ້ງ ໄປຮຽນຢູ່ຈີ່ ນາຍໂມ້ ແຂວງ ວຽງຈັນທນ໌.

ກາງເດືອນເມສາ April 1953, ຝຣັ່ງເສສໄດ້ສົ່ງທະຫານຝຣັ່ງປະສົມຫລາຍຊາຕ ສອງກົມ ຕິດຕາມກວດລ້າງທະຫານວຽດມິນ ທີ່ໄດ້ຖອຍອອກຈາກທົ່ງໄຫຫີນ ດັ່ງນີ້:

- ໜຶ່ງກົມປະສົມທະຫານຕ່າງດ້າວ ທີ່ມາຈາກຢູໂຣບ ພ້ອມທະຫານວຽດນາມໃຕ້ ກວດລ້າງຕາມຖນົນເລຂທີ່ 4 ຈາກທົ່ງໄຫຫີນ, ລາດຮວ້ງ, ດົງດ່ານ ໄປປົດປ່ອຍເມືອງຊຽງຂວາງ ແລ້ວໃຫ້ ລໍຢູ່ທີ່ນັ້ນ ຈົນກວ່າຈະໄດ້ຮັບຄຳສັ່ງໃໝ່.
- ໜຶ່ງກົມປະສົມຕ່າງດ້າວ ທີ່ມາຈາກຢູໂຣບ ຕິດຕາມກວດລ້າງວຽດມິນ ຕາມເສັ້ນທາງ ເລຂທີ່ 7 ຈາກທົ່ງໄຫຫີນ, ສັງໄຂ, ພູດູ່, ຕາດເປີບ ໄປປົດປ່ອຍບ້ານບານ ແລ້ວໃຫ້ ລໍຖ້າຢູ່ທີ່ນັ້ນ.

ທ້າຍເດືອນມິຖຸນາ (June) ປີ 1953, ສອງກອງພັນຄື: ກອງພັນເຜົ່າລາວ ແລະ ເຜົ່າມົ້ງ ໄດ້ສຳເຣັດການຝຶກໂດດຈ້ອງແລ້ວ ໄດ້ກັບຄືນຊຽງຂວາງ ກໍໄດ້ຮັບພາຣະກິດກວດລ້າງທະຫານວຽດມິນ ໄປຕາມຈຸດຕ່າງໆ ໃນແຂວງຊຽງຂວາງ ແລະຕຽມໄປໜູນຫລັງຄ້າຍ ດຽນບຽນຝູ. ການກວດລ້າງກອງທະຫານວຽດ ມິນໃນແຂວງຊຽງຂວາງ ເລີ່ມແຕ່ທ້າຍເດືອນມິຖຸນາ (June) ປີ 1953 ມີດັ່ງນີ້:

- ກອງພັນທະຫານເຜົ່າມົ້ງ ບັງຄັບບັນຊາໂດຍຈ່າເອກ ຢົ້ວວາ ລີ, ໄດ້ເຄື່ອນຈາກທົ່ງໄຫຫີນ ໄປຫາ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມືອງຊຽງຂວາງ ເພື່ອໄປສົມທົບກັບກຣົມທະຫາຣປະສົມຝຣັ່ງເສສ ທີ່ໄດ້ໄປລໍຖ້າຢູ່ອ້ອມຕົວເມືອງ ຊຽງຂວາງ. ກອງພັນຈ່າເອກ ຢົ້ວວາລີ ເປັນກອງພັນນຳໜ້າຕລອດທາງ ໄດ້ມຸ່ງໜ້າໄປ ກວດລ້າງ ຕາມແຖວຕາວັນອອກ ເມືອງຊຽງຂວາງໄປຫາເມືອງໜອກ ແລະກວດລ້າງໄປໄກ້ຈະເຖິງຊາຍ ແດນວຽດນາມ ແຖວເມືອງແສນ ທິດໃຕ້ວຽດນາມເໜືອ.

- ສອງກອງພັນໂດດຈອ້ງເຜົ່າລາວແລະເຜົ່າມົ້ງ, ກອງພັນເຜົ່າລາວ (ຜູ້ບັງຄັບກອງພັນ ແມ່ນຈ່າເອກ ທ້າວເດືອນສຸນນະຣາຊ), ກອງພັນເຜົ່າມົ້ງ (ຜູ້ບັງຄັບກອງພັນ ແມ່ນຈ່າເອກເນັ້ງຈື້ ທ່າວ). ທັງສອງ ກອງພັນນີ້ ຢູ່ໃຕ້ການບັງຄັບບັນຊາຂອງ ຣ.ທ. ມາສແມສນີເອ (Lt. Max Mesnier), ຜູ້ລອງແມ່ນ ຣ.ທ. ວ່າງປາວ (Assistant-Commander). ມີນາຍທະຫາຣຝຣັ່ງເສສ ຜູ້ຊ່ວຍ ດັ່ງນີ້: ຈ່າເອກເອເມຣີ (Sgt. Emery), ແລະຈ່າເອກ ເລນເກຼດເດີ (Sgt. Langlade). ໄດ້ເລີ່ມ ປະຕິບັດ ການກວດລ້າງທະຫາຣວຽດມິນ ໄປຫາພູດູ່, ສັນຈໍ້ ໄປສົມທົບກັບທະຫາຣບ້ານ ສາມ ກອງພັນ ແມ່ນທະຫາຣກອມມັງໂດ (Hmong Commando) ທີ່ໄດ້ຕັ້ງຢູ່ສັນຈໍ້ກ່ອນແລ້ວ. ຜ.ບ. ຂອງສາມ ກອງພັນມີດັ່ງນີ້: ກອງພັນຂອງນາຍກອງຫວາໄກຢ່າງ, ກອງພັນຂອງນາຍ ກອງຕົງ ປາວລີ ແລະ ກອງພັນຂອງນາຍກອງມົ້ງ ວ່າງ (ບໍ່ຈື່ຊື່).

ຫລັງຈາກສັນຈໍ້ແລ້ວ ສອງກອງພັນໂດດຈອ້ງລາວແລະເຜົ່າມົ້ງ ໄດ້ກວດລ້າງທະຫາຣຂອງວຽດມິນ ລົງ ໄປ ໃສ່ບ້ານບານ ຕາມທີ່ໄດ້ນັດພົບກັບ ຜ.ບ. ກຣົມປະສົມຕ່າງດ້າວຝຣັ່ງເສສ ທີ່ລໍຢູ່ບ້ານບານ. ຫລັງຈາກໄດ້ ພົບກັນຢູ່ບ້ານບານແລ້ວ ຜ.ບ. ກຣົມໂດດຈອ້ງລາວແລະເຜົ່າມົ້ງ ໄດ້ອອກຈາກບ້ານບານ ໄປໂຈມ ຕີທະ ຫາຣວຽດມິນຢູ່ທີ່ບ້ານພູໜອງ ທີ່ມີທະຫາຣວຽດມິນຕັ້ງຢູ່ປະມານໜຶ່ງກອງພັນ ໄດ້ບຸກໂຈມຕີຕອນ ເຊົ້າໆ ຕອນທີ່ວຽດມິນບໍ່ຕັ້ງຕົວ ຕໍ່ສູ້ກັນຫລາຍຊົ່ວໂມງ ຜົລເສັຍຫາຍ ຝ່າຍເຮົາເສັຍຊີວິດສອງຄົນ ມົ້ງໜຶ່ງ ລາວ ໜຶ່ງ, ຖືກບາດເຈັບ ມົ້ງໜຶ່ງ ແລະລາວໜຶ່ງຄົນ ແມ່ນຈ່າເອກທ້າວເດືອນສຸນນະຣາຊ. ຝ່າຍສັດ ຕຣູບໍ່ຊາບ, ເພາະຕ່າງຝ່າຍຕ່າງຖອຍອອກຈາກກັນ ແຕ່ແນ່ນອນວ່າຝ່າຍວຽດມິນ ຕ້ອງມີການເສັຍ ຫາຍຫນັກກ່ວາ ຝ່າຍເຮົາ ເພາະສັດຕຣູບໍ່ໄດ້ຕຽມ ແລະສັດຕຣູກໍຢູ່ໃນພື້ນທີ່ຕ່ຳກ່ວາ. ກຣົມທະຫາຣຝ່າຍ ມິຕໄດ້ຖອຍ ກັບໄປພັກຜ່ອນຢູ່ບ້ານບານ ປະມານໜຶ່ງອາທິຕຍ໌ແລ້ວ ກອງພັນໂດດຈອ້ງເຜົ່າມົ້ງ ກໍໄດ້ ກັບໄປສັນຈໍ້. ສຳຫລັບກອງພັນໂດດຈອ້ງເຜົ່າລາວ ກໍໄດ້ຄ້າງຢູ່ບ້ານບານ ເພາະຜູ້ຮອງບັນຊາການ ທ່ານ ຈ່າເອກ ເດືອນສູນນາຣາຊ ໄດ້ຖືກບາດເຈັບ.

ເມື່ອໄປເຖິງສັນຈໍ້ ກອງພັນໂດດຈອ້ງເຜົ່າມົ້ງ ໄດ້ໄປສົມທົບກັບສາມກອງພັນທະຫາຣບ້ານ ທີ່ລໍຖ້າຢູ່ສັນຈໍ້ ກ່ອນ ເປັນໜຶ່ງກຣົມຢູ່ໃຕ້ການບັງຄັບບັນຊາຂອງ ຣ.ທ. ມາສ ແມສນີເອ ແລະ ຣ.ທ. ວ່າງປາວ ຜູ້ຮອງ. ໄດ້ ອອກເດີນທາງຈາກສັນຈໍ້ ໄປຫາບ້ານຫວ້ຍກີນີນ. ໃນລະຫວ່າງກາງທາງ ສັດຕຣູໄດ້ວາງແຜນດັກສະກັດ ຝ່າຍເຮົາ ເຮັດໃຫ້ທະຫາຣບ້ານ ເສັຍຊີວິຕສອງນາຍ ຝ່າຍສັດຕຣູ ຕາຍ 5 ນາຍ. ຝ່າຍເຮົາໄດ້ເຄື່ອນ ຕໍ່ໄປ ຈຶ່ງໄດ້ຂ່າວການເຄື່ອນໄຫວຂອງສັດຕຣູ ຢູ່ຫ່າງໄກຈາກບ້ານຫວ້ຍກີນີນບໍ່ເທົ່າໃດ. ທ່ານ ຣ.ທ. ວ່າງປາວ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄດ້ນຳກຳລັງໄປບຸກຢ່າງລັບໆ ໂດຍສັດຕຣູບໍ່ໄດ້ຮູ້ເມື່ອຕົວຕາຍຄາທີ່ 20 ສິບ ມີຜູ້ບາດເຈັບຫລາຍຄົນ ພວກທີ່ເຫລືອໄດ້ແຕກໜີໄປ ຝ່າຍເຮົາປອດພັຍ. ໄດ້ເຄື່ອນທີ່ໄປຈົນເຖິງບ້ານເກົ່າຂອງ ທ່ານລໍ ເປລັ່ຍຢ້າວ ຫລື ທ່ານໄກຕົງ ຊື່ບ້ານແກ້ງຄວາຍ ໄດ້ປະທະກັບສັດຕຣູບາງເລັກນ້ອຍ. ຜູ້ບັງຄັບບັນຊາຝຣັ່ງເສສ ໄດ້ສັ່ງໃຫ້ເຄື່ອນໄປເລື້ອຍໆ ຈົນເຖິງບ້ານພັກລັກ ໄດ້ມີການປະທະກັບສັດ ຕຣູຢູ່ບ້ານນີ້ບາງເລັກນ້ອຍ ກຣົມທະຫາຣຝ່າຍມິຕໄດ້ຢຸດພັກເຊົາຢູ່ບ້ານພັກລັກ ຊົ່ວຄາວ ເພື່ອລໍຖ້າຮັບຄຳສັ່ງໃໝ່, ລໍຖ້າການລຳລຽງ ສະບຽງອາຫາຣ, ລູກກະສູນປືນແລະການເສີມກຳລັງ. ເມື່ອໄດ້ລັບທຸກຢ່າງຮຽບຮ້ອຍແລ້ວ ກຣົມທະຫາຣ ຈຶ່ງໄດ້ເຄື່ອນທີ່ໄປຕາມແຜນ ໂດຍໄດ້ໃຊ້ກົນອຸບາຍຍຸທການຄື ເຮັດທຳທ່າຈະໄປໂຈມຕີສັດຕຣູ ຢູ່ໜອງ ແຮດ, ຕອນກາງຄືນນັ້ນໄດ້ປ່ຽນທິດທາງເດີນ ໄປຈຸດອື່ນຄື ມຸ່ງໜ້າໄປໃສ່ບ້ານແກ້ວປະຕູ ຊຶ່ງເປັນ ບ້ານເດີມຂອງພໍ່ຂອງທ່ານ ຣ.ທ. ວ່າງປາວ, ເພື່ອໄປໂຈມຕີກອງພັນທະຫາຣວຽດມິນ ຕັ້ງຢູ່ທີ່ນັ້ນ ແມ່ນ ສູນກາງກຣົມ 195. ກ່ອນຈະເຄື່ອນກຳລັງອອກໄປໂຈມຕີກັບສັດຕຣູຄັ້ງນັ້ນ, ຜູ້ບັນຊາການກຣົມຝຣັ່ງເສສ ໄດ້ຮ້ອງຂໍໃຫ້ກອງພັນຂອງຈ່າເອກ ຢົ້ວວາ ລີ ເດີນທາງໄປເສີມກຳລັງກ່ອນ. ການເຂົ້າໄປໂຈມຕີ ມີແຜນ ດັ່ງນີ້:

- ໜຶ່ງກອງພັນຂອງຈ່າເອກ ຢົ້ວວາ ລີ ປະສົມໜຶ່ງກອງພັນທະຫາຣ ກອມມັງໂດເຜົ່າມົ້ງ, ມີໜ້າທີ່ ເຄື່ອນໄປຈາກທິດໃຕ້ ຫາທິດຕາວັນອອກ ສ່ຽງໃຕ້ສູ່ບ້ານແກ້ວປະຕູ.
- ໜຶ່ງກອງພັນທະຫາຣຮາບອາກາສຂອງ ທ່ານ ຣ.ທ. ວ່າງປາວ ປະສົມກັບໜຶ່ງກອງພັນທະຫາຣ ກອມມັງໂດ ເຄື່ອນໄປຈາກທາງທິສໃຕ້ ດ້ານຕາວັນຕົກໄປໃສ່ທິດຕາວັນອອກດ້ານເໜືອ ບ້ານ ແກ້ວປະຕູ, ພາຣະກິດທັງໝົດ ແມ່ນໄປໂຈມຕີທີ່ໝັ້ນຂອງສັດຕຣູ ຢູ່ບ້ານແກ້ວປະຕູ.

ການສູ້ຣົບກັບສັດຕຣູດຳເນີນໄປຢ່າງຣູນແຮງທີ່ສຸດ ກີນເວລາເກືອບສາມຊົ່ວໂມງ. ຜົລຂອງການສູ້ຣົບ ເປັນດັ່ງນີ້:

- ຝ່າຍມິຕ ກອງພັນຂອງ ຣ.ທ. ວ່າງປາວ ແລະ ກອງພັນກອມມັງໂດ ປອດພັຍ;
- ກອງພັນຈ່າເອກຢົ້ວວາ ລີ ເສັຍຊີວິດ ໜຶ່ງນາຍ ແລະບາດເຈັບໜຶ່ງນາຍ ຊື່ເປັ້ຍຢ້າວຊົງ.

ກອງພັນແກວວຽດມິນຕັ້ງກອງຕໍ່ສູ້ຢູ່ເຕັມບ້ານ ບໍ່ສົນໃຈພູອ້ອມບ້ານ. ຝ່າຍມິຕຈຶ່ງໄດ້ໂອກາສຍຶດພູສູງຢູ່ ອ້ອມບ້ານໂຈມຕີ. ຝ່າຍສັດຕຣູບໍ່ຊາບການເສັຍຫາຍ ແຕ່ຕາມຄຳໃຫ້ການຂອງຊາວບ້ານ ວ່າວຽດມິນມີ ການເສັຍຫາຍຢ່າງຫນັກ ເພາະສັດຕຣູຢູ່ບ່ອນຕ່ຳແລະບໍ່ໄດ້ຕຽມ, ແມ່ນຍາມເຊົ້າເວລາ 5:00 ໂມງ. ສັດ ຕຣູໄດ້ຖອຍອອກໄປ ບໍ່ຍອມຕໍ່ສູ້. ເພື່ອຄວາມປອດພັຍ ຝ່າຍມິຕບໍ່ໄດ້ເຂົ້າໄປກວດ ເບິ່ງການເສັຍຫາຍ ຂອງສັດຕຣູ. ທ່ານ ຣ.ທ. ວ່າງປາວໄດ້ນຳກຳລັງຖອຍ ໄປຕັ້ງຫລັກແລະພັກຜ່ອນຢູ່ບ້ານຜາບູນ ຫລາຍວັນ ແລ້ວໄດ້ເຄື່ອນໄປບ້ານພັກແຄະ, ເພື່ອກວດລ້າງທະຫາຣວຽດມິນແຖວນັ້ນ ແຕ່ພວກວຽດມິນໄດ້ໃຊ້ແຜນ ຍຸທວິທີໃໝ່ ຄື ວຽດມິນຮູ້ວ່າຝ່າຍຝຣັ່ງເສສໃຊ້ເຜົ່າມົ້ງ ເຮັດກອງໂຈຣໄດ້ຜົລດີ, ທະຫາຣວຽດມິນຈຶ່ງ ຫັນ ໄປໃຊ້ຄົນມົ້ງ ທີ່ສນັບສນຸນເຂົາ ເພື່ອເຮັດກອງໂຈຣ ຕໍ່ຕ້ານຝ່າຍຝຣັ່ງເສສ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເດືອນກັນຍາ (September) ປີ 1953 ຫາເດືອນຕຸລາ (October) ປີ 1953, ການທຳສົງຄາມກັບວຽດມິນໄດ້ເກີດບັນຫາຫຍຸ້ງຍາກຫລາຍຢ່າງຂຶ້ນ, ເພາະວຽດມິນໄດ້ຫັນມາໃຊ້ຊາວມົ້ງຂອງຝ່າຍຕົນຄື: ໃຊ້ຊາວບ້ານ ຜູ້ທີ່ຮູ້ທາງ ຮູ້ພື້ນທີ່ດີ ເປັນນາຍທາງ ແລະ ເປັນຜູ້ຫາຂ່າວ. ຢູ່ແຖວພັກແຄະໄປຫານ້ຳມັດ ໄດ້ເຮັດໃຫ້ກອງພັນທະຫາຣຣາບອາກາສ ໄດ້ເສັຍທະຫາຣຫລາຍຄົນ ເພາະໜ່ວຍກອງໂຈຣຂອງວຽດມິນລັດທາງຍິງກອງພັນກອມມັງໂດປະສົມກອງພັນທະຫາຣຣາບອາກາສ ຕ້ອງສູນເສັຍນາຍກອງ ມົ້ງວ່າງ ຜູ້ເປັນຄົນສຳຄັນທີ່ສຸດຢູ່ແຖວບ້ານພັກແຄະ ແລະເປັນ ຜ.ບ. ກອງພັນກອມມັງໂດ. ການຕໍ່ສູ້ໄດ້ດຳເນີນໄປໄດ້ຫລາຍວັນ ຈຶ່ງເບົາບາງລົງ.

ໃນວັນທີ່ 16 ເດືອນ ພຶສຈິກາ (November) ປີ 1953, ກອງພັນທະຫາຣຣາບອາກາສ ແລະສາມ ກອງພັນກອມມັງໂດ ໄດ້ເຄື່ອນໄປໜອງແຮດ. ໃນຂນະທີ່ເດີນທາງໄປເຖິງບ້ານພູໜອງສາມແຈ, ກຣົມທະຫາຣ (ຜ.ບ. ແມ່ນ ທ່ານແມສນີເອ ແລະ ຣ.ທ. ວ່າງປາວ ຜູ້ລອງ) ໄດ້ທຳການປິດລ້ອມບ້ານໄວ້ ໃນເວລາປະມານ 4 ຫລື 5 ໂມງເຊົ້າ, ໄດ້ເຂົ້າຍຶດຫົວພູໜຶ່ງໜ່ວຍ ຢູ່ໄກ້ໆບ້ານ ຕຽມຈະບຸກບ້ານໜອງສາມແຈ. ທະຫາຣຝ່າຍມິຕ ທີ່ຢູ່ພູນີ້ບໍ່ໄດ້ສົນໃຈ ພູໜ່ວຍທີ່ສູງກວ່າ ແລະຢູ່ຫ່າງປະມານໜຶ່ງກິໂລແມຕຣ໌. ແຕ່ ຣ.ທ. ວ່າງປາວ ແລະໜຶ່ງກອງຮ້ອຍບັນຊາການ ໄດ້ມຸ່ງໜ້າໄປໃສ່ພູທີ່ສູງກວ່າໝູ່ນີ້. ພໍຂຶ້ນໄປເກືອບຈະຮອດຍອດພູ ຣ.ທ. ວ່າງປາວ ໄດ້ພົບຮອຍຕີນແລະສາຍທາງໃໝ່ໆຂອງສັດຕຣູ ຈຶ່ງໄດ້ຢຸດໃຫ້ແຈ້ງກ່ອນ ເພື່ອໃຫ້ຮູ້ເຫັນຈຸດຂອງສັດຕຣູຄັກໆເສັຽກ່ອນ. ພໍຮຸ່ງແຈ້ງຂຶ້ນມາ ວຽດມິນໄດ້ຮອ້ງໃສ່ຝ່າຍຝຣັ່ງເສສ ທີ່ຢູ່ພູໜ່ວຍຕ່ຳກ່ວາ ນັ້ນວ່າ "*ກອງທະຫາຣຢູ່ຫົວພູລູ່ມນີ້ ແມ່ນມິຕຫລືສັດຕູ?*" ເວົ້າເປັນພາສາວຽດ ສອງຄັ້ງ ແລະເປັນພາສາມົ້ງໜຶ່ງຄັ້ງ, ສຽງປືນກໍດັງລັ່ນລົງໃສ່ທະຫາຣຝ່າຍມິຕ ທີ່ຢູ່ຫົວພູໄກ້ໆບ້ານ ເຮັດໃຫ້ມີຄົນບາດເຈັບຫລາຍຄົນ.

ໃນເວລາແກວຮອ້ງຂຶ້ນນັ້ນ ຣ.ທ. ວ່າງປາວ ຢູ່ໄກ້ໆກັບສັດຕຣູ ທ່ານຈຶ່ງມີໂອກາສ ຍິງລູກລະເບີດ ບີວີ BV ໄປໃສ່ (ເປັນລູກລະເບີດທີ່ຍິງຈາກປາຍປືນໄປໃສ່ສັດຕຣູ) ສອງລູກ ໄດ້ຕົກໃສ່ຈຸດທີ່ວຽດມິນຍິງປືນອອກມາ. ເຮັດໃຫ້ສັດຕຣູຕາຍ, ບາດເຈັບຫລາຍຄົນ. ທະຫາຣສັດຕຣູຄົນໜຶ່ງໄດ້ຮັບບາດເຈັບໜັກ ບໍ່ສາມາຕໜີທັນ ໄດ້ເລືອເຂົ້າໄປລີ້ຢູ່ໃນຖ້ຳ ຢູ່ໄກ້ເທິງພູສູງນັ້ນ ແລະມີເລືອດເຕັມຕາມຮອຍທີ່ເລືອໄປ. ຣ.ທ. ວ່າງປາວ ຈຶ່ງໄດ້ສັ່ງໃຫ້ຫລານຊາຍຕາມລ່າສັດຕຣູ ຜູ້ໄດ້ຮັບບາດເຈັບນັ້ນໄປຫາຖ້ຳ, ແຕ່ບາງເອີນສັດຕຣູ ຢູ່ໃນຖ້ຳນັ້ນ ໄດ້ຍິງປືນອອກໄປໃສ່ນາຍທົ້ງວ່າງ ຫລານຊາຍຂອງ ຣ.ທ. ວ່າງປາວ ເສັຍຊີວິດຄາທີ່. ແມ່ນຜູ້ໃສ່ໝວກຂາວ ຢືນຢູ່ເບື້ອງຂວາ ດ້ານຫລັງຂອງທ່ານ ຣ.ທ. ວ່າງປາວໃນຮູບລູ່ມນີ້. ຈ່າເອກ ເອເມຣີ (Sgt. Emery) ໄດ້ພຍາຍາມເຂົ້າໄປເອົາສົບຂອງທົ້ງວ່າງ, ແຕ່ທ່ານກໍໄດ້ຮັບບາດເຈັບສາຫັດ. ຣ.ທ. ວ່າງປາວ ໄດ້ຍິງຕໍ່ສູ້ສັດຕຣູ ເພື່ອເຂົ້າໄປເອົາສົບຫລານຊາຍ ແຕ່ກໍຖືກສັດຕຣູຍິງ ບາດເຈັບຫລາຍສົມຄວນ; ທະ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຫາຣສອງຄົນໄດ້ບຸກເຂົ້າໄປຊ່ວຍ ຣ.ທ. ວ່າງປາວ, ຜູ້ໜຶ່ງຖືກຍິງເສັຍຊີວິດ ແລະ ຜູ້ນຶ່ງໄດ້ຮັບ ບາດສາຫັດ ຊື່ ມົວຈາ. ຝ່າຍມິດໄດ້ຢຸດຕໍ່ສູ້ກັບສັດຕຣູຄືນນັ້ນ ຈົນກະທັ້ງ 4 ຫລື 5 ໂມງແລງ ຈຶ່ງ ໄດ້ກັບໄປໂຈມຕີອີກ, ແຕ່ບໍ່ມີການຕໍ່ສູ້ຈາກສັດຕຣູ, ເພາະວ່າສັດຕຣູໄດ້ໜີໄປແລ້ວ  ຝ່າຍມິດໄດ້ເຂົ້າ ໄປເກັບຊາກສົບຂອງຜູ້ ເສັຍຊີວິດ ເພື່ອນຳໄປທຳພິທີ ແລະ ຝັງ.

ໃນປີ 1957 ລາວໄດ້ຮັບເອກຣາຊຈາກຝຣັ່ງເສສ, ສອງຝ່າຍໄດ້ມາໂຮມວົງສ໌າຂະນາຍາດ, ຈຶ່ງຮູ້ວ່າ ບຸກຄົນຜູ້ຍິງ ຣ.ທ. ວ່າງປາວນັ້ນ ແມ່ນຄົນມົ້ງ ເສັງຢາງ ທີ່ເຄີຍໄດ້ຮ່ວມຢູ່ໃນກອງທະຫາຣວຽດມິນ ມານານ. ຜູ້ກ່ຽວໄດ້ຖືກສະເກັດ ບີວີ (BV) ເຮັດໃຫ້ເລືອດອອກຫລາຍ ຈົນໜ້າມືດ ບໍ່ສາມາດໜີໄປໄດ້ ຈຶ່ງໄດ້ສູ້ຕາຍ, ພໍດີໃນເວລາດຽວກັນ ເພື້ອກໍມືດມົວໃປທົ່ວບໍຣິເວນ ຈົນມອງບໍ່ເຫັນໃນລະຍະ 20 ຫລາ   ຈຶ່ງສາມາດເອົາຕົວລອດໄປໄດ້.



33: Le sous-lieutenant Vang Pao et son commando de réguliers méo. *Fonds Mesnier*

*<u>ຮູບທີ່ 28</u>. ທ່ານ ຣ.ທ. ວ່າງປາວ ຜູ້ຢືນຢູ່ຕໍ່ໜ້າ ແລະ ຫລານ ຊາຍທົ້ງວ່າງ ຜູ້ຖືໝວກສີຂາວ ໄດ້ເສັຍຊີວິດຢູ່ ພູໜອງສາມແຈ. ເດືອນພຶສຈິກາ( November) ວັນ ທີ່ 16, 1953.*

ຫລັງຈາກການສູ້ລົບບ້ານພູໜອງສາມແຈແລ້ວກອງພັນທະຫາຣຣາບອາກາດແລະສາມກອງພັນທະຫາຣ ກອມມັງໂດ ໄດ້ໄປຢຸດພັກຢູ່ບ້ານຜາບູນ. ທ່ານ ຣ.ທ. ວ່າງປາວ ໄດ້ໄປຮັກສາຕົວ ດີແລ້ວ ໄດ້ຂຶ້ນຊັ້ນ ເປັນ ຮ້ອຍເອກ ແລ້ວໄດ້ກັບຄືນໄປເປັນຜູ້ບັງຄັບບັນຊາການ ກຣົມທະຫາຣມົ້ງຄືເກົ່າ  ຍັງໄດ້ຮັບພາຣະກິຈ ກວດລ້າງພວກວຽດມິນຢູ່ຕາມຊາຍແດນວຽດນາມເໜືອແລະລາວ. ການປະຕິບັດງານນີ້ ໄດ້ເຮັດໃຫ້ຝ່າຍ ສັດຕຣູເສັຍຂວັນຫລາຍທີ່ສຸດ ເພາະ ຣ.ອ. ວ່າງປາວໄດ້ວາງແຜນຍຸທວິທີແບບໃໝ່ຄື: ໂຈມສັດຕຣູໃນ ເວລາກາງຄືນ ໂດຍໃຊ້ທາງລັບທີ່ສັດຕຣູບໍ່ສາມາຖຮູ້. ຜົນງານດັ່ງກ່າວ ໄດ້ເຮັດໃຫ້ທ່ານ ຣ.ອ. ວ່າງປາວ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄດ້ຮັບຄວາມຍ້ອງຍໍສັນຣະເສີນ ແລະດັງໄປເຖິງຫູຂອງໂຮຈິມິນ. ຜູ້ກ່ຽວຈຶ່ງເວົ້າວ່າ: "ວ່າງປາວ ຕິເສີກ ເກັ່ງຫລາຍ". ຣ.ອ. ວ່າງປາວໄດ້ປົດປ່ອຍເອົາຈຸດສຳຄັນຫລາຍແຫ່ງ ຄື:

- ຄ້າຍນ້ຳກັນ, ເປັນຄ້າຍເກົ່າເຈົ້າເມືອງ ຕົງປາວ ລີ ໄດ້ໜີອອກໃນປີ 1952, ຕອນລາວອິສສຣະ, ທະຫາຣ ວຽດມິນ ແລະຝ່າຍມົ້ງລໍ ໄດ້ຂຶ້ນໄປໂຈມຕີໜອງແຮດ. ສັດຕຣູໄດ້ປ້ອງກັນຄ້າຍນີ້ຢ່າງດີ ແຕ່ກໍຕ້ອງເສັຍໃຫ້ ຣ.ອ. ວ່າງປາວ. (*ໃນປີ 1977 ວຽດນາມເໜືອ ໄດ້ຫຍັບຊາຍແດນ ໄປໃສ່ຄ້າຍນ້ຳກັນ ປະມານ 20 ກວ່າກິໂລແມຕຣ໌ ຈາກຊາຍແດນເດີມ ເຂົ້າໄປໃສ່ດິນຂອງລາວ. ເຊີນເບິ່ງພາຄ 9 ຮູບ 148*). ບ້ານໜອງຊຽວ ແມ່ນບ້ານສຳຄັນຂອງພີ່ນ້ອງມົ້ງລີ (ຂອງນາຍກອງຫວາໄກລີ) ຖືກມົ້ງລໍ ແລະວຽດມິນ ເຂົ້າມາໂຈມຕີ ເທື່ອນີ້ ເຮັດໃຫ້ພີ່ນ້ອງມົ້ງ ໃນເຂຕ ໜອງ ໄດ້ອົພະຍົບໄປຢູ່ລາດຮ້ວງແລະຊຽງຂວາງ ຫລາຍພັນຄົນ.

- ຍຶດໄດ້ທາງທິດຕາວັນອອກຂອງໜອງແຮດຢູ່ໄກ້ຊາຍແດນລາວ-ວຽດນາມເໜືອ ແຖວປາກຄາ (ບ້ານແມ່ ຂອງທ່ານ ພ.ອ. ລີ ໝາວເກົາ ລີຟຸງ). ເມື່ອກວດລ້າງທະຫາຣວຽດມິນ ຢູ່ທາງທິດເໜືອຂອງໜອງແຮດ ໄປຫາບ້ານຂອງທ່ານກ່າເຢ້ວ່າງ, ບ້ານ ພ.ທ. ວ່າງຟູງ ຊື່ບ້ານ ແກວບອນ ຈຶ່ງໄດ້ຖອຍກັບຄືນໄປພັກ ຜ່ອນຢູ່ຄ້າຍທະຫາຣຝຣັ່ງ ທີ່ໜອງແຮດ.



*<u>ຮູບທີ່ 29</u>. ກອງພັນທະຫານກອມມັງໂດ ເຜົ່າມົ້ງທີ່ໄປກວດລ້າງສັດຕຣ ວຽດມິນ ຢູ່ໃນບໍຣິເວນ ໜອງແຮດໃນ ປີ 1953*

ໃຫ້ອ່ານເບິ່ງປຶ້ມຂອງ ພັນໂທ ດາວິດ (Lt. Col. David) ໄດ້ບັຣະຍາຍ ຢູ່ໜ້າ 263 ຕໍ່ໆໄປ, ກ່ຽວກັບຄວາມ ສຳຄັນຂອງການຈັດຕັ້ງ ແລະການປະ ຕິບັດໜ້າທີ່ທາງທະຫາຣຂອງຊຸມຊົນ ເຜົ່າມົ້ງແລະເຜົ່າລາວ ນຳພາໂດຍ ສອງທ່ານຄື: ເຜົ່າມົ້ງແມ່ນພຣະຍາ ຕູ້ບີ ລີຟຸງ, ເຜົ່າລາວ ແມ່ນທ່ານເຈົ້າສາຍຄຳ ສຸທະກະກຸມາຣ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1944-1945, ຫາກບໍ່ມີສອງທ່ານນີ້ແລ້ວ ການປະຕິບັດງານຂອງກອງຮ້ອຍ ເອໂຣລ (Ayrolles) ອາດຈະໄປບໍ່ລອດ. ໃນປີ 1945-1946, ຣ.ອ. ບິສສະຫລໍ (Capt. Bichelot) ກໍອາດຈະບໍ່ມີ ຄວາມ ສາມາຖຕາມລ່າພວກຍີປຸ່ນ ແລະວຽດມິນຕໍ່ໄປໄດ້ຄືກັນ. ໃນປີ 1950-1952, ຫລັງຈາກທ່ານ ທັງສອງຄົນ ນີ້ແລ້ວ ກໍມີຄນະທີ່ສືບຕໍ່ ຈື່ງພາໃຫ້ທ່ານເດີຟາສເຢີ (Defarges) ດຳເນີນ ວຽກການໄດ້ ແລະ ໃນປີ 1953-1954, ກໍມີທ່ານຮາເຢ (Haze) ທີ່ຄົນມົ້ງຫລາຍຄົນຮູ້ທ່ານດີ, ເພິ່ນແມ່ນຜູ້ເອົາຣົຖຍີບ (Jeep) ໃຫ້ນາຍກອງຈິງຕົວມົວ, ຊື່ງເປັນຄົນມົ້ງ ຜູ້ທຳອິດໄດ້ຂັບຣົຖເປັນ. ຍ້ອນ ການຂັບຣົຖຍັງບໍ່ທັນ ຊຳນານດີພໍ, ຕອນຂັບຣົຖຂຶ້ນພູ, ໃສ່ເກັຍບໍ່ຖືກ, ຣົຖຈື່ງຖອຍຫລັງລົງພູ ປີ້ນຕົກລົງຫ້ວຍ ເຮັດໃຫ້ນາຍ ກອງຈິງຕົວໄດ້ ຮັບບາດເຈັບສາຫັດ. ທ່ານຮາເຢໄດ້ສົ່ງຜູ້ກ່ຽວໄປປົວທີ່ຮາໂນຍ ວຽດນາມເໜືອ ແຕ່ໄປ ບໍ່ທັນຮອດ ໄດ້ ເສັຍຊີວິຕກ່ອນໃນຣະຫວ່າງທາງ ຈື່ງໄດ້ນຳສົພກັບພູດູ່ ເພື່ອທຳພິທີ. ເຫຕການນີ້ໄດ້ເກີດຂຶ້ນຕົ້ນປີ 1952.

## ການປະຕິບັດງານຂອງ ພ.ອ. ແມສນິເອ

ທ່ານແມສນິເອ ເປັນຜູ້ຊ່ຽວຊານໃນພະແນກ GCMA (Groupement de Commandos Mixtes Aeroportes). ຫລັງຈາກຈົບຈາກໂຮງຮຽນນາຍຮ້ອຍຢູ່ເມືອງຝຣັ່ງແລ້ວ ທ່ານໄດ້ຖືກສົ່ງມາປະຈຳການຢູ່ ອິນດູຈີນ. ໃນປີ 1953 ທ່ານໄດ້ຮ່ວມໜ່ວຍຕໍ່ຕ້ານ ຢີຊີແອມເອ (GCMA) ຢູ່ໄຊງ່ອນ ວຽດນາມໃຕ້ ແລ້ວ ໃນເດືອນກໍຣະກະດາ (July) ປີ 1953 ໄດ້ຍ້າຍໄປປະຕິບັຕໜ້າທີ່ຢູ່ຊັງໄຂ ແຂວງຊຽງຂວາງ ຢູ່ພາຍ ໃຕ້ ການບັງຄັບບັນຊາຂອງ ຣ.ອ. ເດີບາແຊງເດີ ບີຊົງ (de Bazinde Bizons) ຊື່ງເປັນນາຍ ທະຫານຳ ເບີໜື່ງ ທີ່ມີຄວາມສາມາຖ ປະຕິບັດໜ້າທີ່ຢູ່ບໍຣິເວນພູສູງ. ຣ.ຕ. ແມສນິເອ ໄດ້ຮັບໜ້າທີ່ ແທນທ່ານຮ້ອຍ ໂທ ເດີໂວ (Devaux) ເປັນຜູ້ ບັງຄັບກຣົມ ຢີຊີແອມເອ (GCMA 201) ມີຮ້ອຍໂທ ວ່າງປາວ ກອງພັນ ເຜົ່າມົ້ງ ປະມານ 900 ຄົນ ແລະ ກອງພັນເຜົ່າລາວລຸ່ມ ປະມານ 1000 ຄົນ.ຈ່າເອກທ້າວເດືອນສຸນນະ ຣາຊ ເປັນຜ.ບ. ກອງພັນ ແມ່ນກອງ ພັນທະຫານຮາບອາກາສ ທີ່ 2. ຢູ່ໃນສອງກອງພັນນີ້ ມີນາຍທະຫານ ເຜົ່າມົ້ງ ແລະເຜົ່າລາວ ບໍ່ຕ່ຳກ່ວາ 20 ນາຍ ແລະ ມີນາຍທະ ຫານຝຣັ່ງເສສ ສອງທ່ານຄື: ຈ່າເອກ ລາງ ກລາດເດີ (Sergent Langlade) ແລະຈ່າເອກ ເອເມີຣີ (Sergent Emery). ຈ່າເອກເອເມີຣີ ແມ່ນຜູ້ ຖືກບາດເຈັບ ຈາກການຕໍ່ສູ້ກັບສັດຕຣູຢູ່ ພູໜອງສາມແຈ. ກຣົມຢີຊີແອມເອ (GCMA 201) ມີພາຣະ ກິຈກວາດລ້າງວຽດມິນ ຢູ່ຕາມພື້ນທີ່ ບໍຣິເວນໜອງແຮດ, ໄປຍຶດພື້ນທີ່ຢູ່ແກ້ວປະຕູ ແລະຮັກສາບໍຣິເວນ ໜອງແຮດ ແຂວງຊຽງຂວາງ. ຣ.ທ. ວ່າງປາວ ແລະລູກນ້ອງທະຫານປະຊາຊົນເຜົ່າມົ້ງ, ເປັນຜູ້ເກັບຂ່າວ ແລະຮວບຮວມຂ່າວການ ເຄື່ອນໄຫວຂອງສັດຕຣູ. ເມື່ອມີການຕໍ່ສູ້ກັບສັດຕຣູ ຈື່ງມີຜົລດີ ໄດ້ທຳລາຍ ສັດຕຣູຢ່າງຮາບຄາບ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com





*ຮູບທີ່ 30. ພ.ອ. ມາສ ແມສນີເອ ພຶສພາ May ວັນທີ່ 8, 2008- ຢູ່ຝລັ່ງ ແລະ ພັນລະຍາ ນາງ ຝຣັງຊົວ (wife Francoise.)*

*ຮູບທີ່ 31. ຣ.ທ. ມາສ ແມສນີເອ ຢູ່ລາວ ໃນເດືອນ ສິງ ຫາ 1954.*

## ການໂຈມຕີຈາກທາງອາກາສດ້ວຍການໃຊ້ເຄື່ອງສັນຍານ

ໃນວັນທີ່ 16 ເດືອນ ພຶສຈິກາ (November) ປີ 1953 ການຕໍ່ສູ້ກັບສັດຕຣູ ເປັນຄັ້ງສຳຄັນຢູ່ພູໜອງ ສາມເຈ. ຕອນນັ້ນ ຣ.ທ. ວ່າງປາວ ເປັນຜູ້ບັນຊາການຕໍ່ສູ້ ມີນາຍທະຫາຣຝຣັ່ງເສສສອງທ່ານ ຮ່ວມຕໍ່ສູ້ນຳຄື: ຈ່າເອກເອເມີຣີ ແລະຈ່າເອກ ລາງກລາດເດີ. ຜົລເສັຍຫາຍ, ຝ່າຍມິດ ເສັຍຊີວິດສອງຄົນ ຜູ້ໄດ້ຮັບບາດເຈັບ ຄື: ຣ.ທ. ວ່າງປາວ, ຈ່າເອກ ເອເມີຣີ, ແລະ ທະຫາຣ ສອງຄົນ. ຝ່າຍສັດຕຣູຕາຍຄາທີ່ 15 ສິບ. ກອງພັນໂດດຈອ້ງ ແລະ ທະຫາຣມາກກີ (GCMA and Marquis) ໄດ້ຢຸດຕິລົງກ່ອນຕົ້ນເດືອນ ທັນວາ (December) ປີ 1953, ນາຍໝໍສາມຄົນໄດ້ໂດດຈອ້ງລົງ ເພື່ອໄປສີດຢາກັນພະຍາທໝາກສຸກໝາກໃສໃຫ້ທະຫາຣທຸກຄົນ ເພາະໃນເວລານັ້ນ ມີທະຫາຣໄດ້ເຈັບໄຂ້ ແລະເສັຍຊີວິດຫລາຍຄົນ. ຕັ້ງແຕ່ເດືອນຕຸລາ (October) 1953 ຫາ ເດືອນມີນາ (March) 1954 ກຣົມປະສົມໂດດຈອ້ງ ແລະ ທະຫາຣມາກກີ ໄດ້ບຸກໂຈມຕີ ທະຫາຣວຽດມິນ ກຣົມ 195 ແລະ ກອງພັນ 81 ຢູ່ໃນບໍຣິ ເວນໜອງແຮດ, ເຮັດໃຫ້ສັດຕຣູເສັຍ ຫາຍຢ່າງໜັກ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ວຽດນາມເໜືອ ລຸກລານ ຣາຊອານາຈັກລາວ

**(ໃຫ້ອ່ານສັນຍາ ໄກສອນ ເຊັນກັບ ວຽດນາມເໜືອ)**

ໃນລະຍະ 10 ກ່ວາປີທີ່ຜ່ານມານີ້, ປະເທສວຽດນາມມີປະຊາຊົນພົລເມືອງ 50 ກ່ວາລ້ານຄົນ, ຫາ ບ່ອນຈະທຳມາຫາກິນລຳບາກຍາກແຄນ. ຣັຖບາລວຽດນາມໄດ້ໃຊ້ຍຸທສາຕ ທາງທະຫາຣເຂົ້າຍຶດຄອງ ລາວຢູ່ໃນບໍຣິເວນທີ່ມີຄວາມອຸດົມສົມບູນຫລາຍແຫ່ງ, ໂດຽສະເພາະແມ່ນພູພຽງ ດົງບໍໂລເວນ ທີ່ເປັນ ບ່ອນປູກຟັງດີງາມ ແລະ ມີນ້ຳລຳທານໄຫລຜ່ານ. ບັງເອີນ ໂຊກເຂົ້າຂ້າງວຽດນາມຄອມມຸຍນິສຕ໌ ທີ່ມີລູກແຫລ້ງຕົນມືອັນສັດຊື່ ຈຶ່ງມີສັນຍາລາວ-ວຽດ ເກີດຂຶ້ນ ຄົນວຽດຈຶ່ງໄດ້ຫລັ່ງໄຫລເຂົ້າໄປໃນພື້ນ ແຜ່ນດິນຂອງລາວເປັນຈຳນວນຢ່າງຫລວງຫລາຍ ອາດຈະບໍ່ຕ່ຳກ່າວ 5 ລ້ານຄົນ. ບໍ່ເທົ່ານັ້ນ ວຽດນາມ ຄອມມຸຍນິສຕ໌ຍັງໄດ້ຂັບໄລ່ຊຸມຊົນເຜົ່າມົ້ງ ແລະຊາວລາວລູ່ມ ໃນບໍຣິເວນທົ່ງໄຫຫີນແລະໃນພາກໃຕ້ ຂອງລາວໃຫ້ອອກໜີຈາກຖິ່ນຖານບ້ານເກີດຂອງພວກເຂົາເຈົ້າ ໄປຢ່າງເຈັບປວດແລະໂຫດຮ້າຍ ທີ່ສຸດ ໂດຽສະເພາະແມ່ນຊຸມຊົນເຜົ່າມົ້ງ. ສ່ວນເຜົ່າລາວລູ່ມ ຍັງໄດ້ອົດຢູ່ສູ້ທົນ ຮ່ວມກັບພວກແກວເໜືອ ແຕ່ ບາງສ່ວນກໍໄດ້ເອົາຕົວຫລົບໜີໄປບ່ອນອື່ນ.

ຊຸມຊົນເຜົ່າມົ້ງສວ່ນໜຶ່ງ ຍັງຍຶດພູເຂົາໄວ້ຫລາຍແຫ່ງ ເພື່ອເປັນທີ່ລີ້ຊ່ອນ ແລະຕໍ່ສູ້ເອົາຊີວິດໃຫ້ຢູ່ ລອດຢ່າງທຸກຂ໌ທໍຣະມາຣທີ່ສຸດ, ໃນລາຍະຫລາຍສິບປີ ໄດ້ຖືກຂ້າຕາຍໄປຫລາຍພັນຄົນຢູ່ໃນສນາມຣົບແລະຖືກຈັບໄປຄຸມຂັງຢ່າງທາລູນທີ່ສຸດ (ເຊີນເບິ່ງຮູບຕໍ່ໄປ). ເໜືອໄປກວ່າສິ່ງທີ່ໄດ້ກ່າວມາເທິງນີ້ແລ້ວ ຣັຖບາລຂອງລາວແດງຄອມມຸຍນິສຕ໌ ຍັງໄດ້ມອບໃບອານຸຍາຕຖືສັນຊາຕລາວ ໃຫ້ປະຊາຊົນວຽດນາມເໜືອເພື່ອໄປອາສັຍຢູ່ພື້ນແຜ່ນດິນລາວ ຈຳນວນຫລາຍກວ່າສອງລ້ານຄົນ. ພວກນີ້ມີສິທເທົ່າທຽມກັບເຈົ້າຂອງປະເທສ ແລະຢູ່ໃນການຄູ້ມຄອງຂອງອຳນາຈທະຫາຣວຽດນາມເໜືອ ແລະໄດ້ອ້າງວ່າ ແມ່ນສິ່ງມາຊ່ວຍພວກລາວແດງຕໍ່ສູ້ພວກກູ້ຊາຕ ທີ່ກຳລັງຕໍ່ສູ້ເອົາປະເທສຄືນ. ດັ່ງນີ້ ຣັຖບາລລາວແດງຈຶ່ງບໍ່ຈຳເປັນຕ້ອງມີກອງທັພ ເປັນຂອງຕົນເອງ, ເພາະອຳນາດທາງທະຫາຣ ແມ່ນກອງທັພວຽດນາມເໜືອ ເປັນຜູ້ດູແລໃຫ້ທັງໝົດ; ຣັຖບາລລາວແດງຈຶ່ງມີແຕ່ສະເພາະກຳລັງຕຳຣວຈ ແລະກອງຫລອນ ທີ່ເປັນຊາວບ້ານ, ເພື່ອຄອຍຈອບເອົາແຕ່ຄວາມຜິດຂອງຄົນລາວ ຜູ້ເປັນເຈົ້າຂອງປະເທສເທົ່ານັ້ນເອງ ແລະ ກໍມີແຕ່ອາວຸທເບົາໆແບບອາກາ 47 ທີ່ມີກະສູນຍິງໄກບໍ່ໄດ້ເທົ່ານັ້ນ. ການປົກຄອງ ຢູ່ໃນປະເທສລາວ ບໍ່ຢູ່ໃນສາຍຕາຂອງຜູ້ສັງເກດການທົ່ວໂລກ ຈຶ່ງປະກົດວ່າຂາດສິທທິມະນຸສຍະຊົນ ຢ່າງຮ້າຍແຮງ ແລ້ວກໍຍັງບໍ່ເຫັນມີປະເທສໃດໃນໂລກ ໄປຢັບຢັ້ງການກະທຳດັ່ງກ່າວນີ້ຢ່າງຈິງຈັງເທື່ອ ຖ້າໄປກໍມີແຕ່ໄປໃຫ້ການຊ່ວຍເຫລືອທາງອື່ນຫລືແນວອື່ນເທົ່ານັ້ນ ເພາະເລ່ຫລ່ຽມຂອງຄອມມຸຍນິສ ມັນເລິກລັບ ພາຍນອກຈຶ່ງບໍ່ມອງເຫັນ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເດືອນສິງຫາ (August) ປີ 2004, ຣັຖບາລວຽດນາມຄອມມຸຍນິສຕ໌ໄດ້ກ່າວຫາວ່າ ຢູ່ໃນປະເທສລາວມີປ່າໄມ້ຕຶບໜາ ແລະເປັນບ່ອນລີ້ຊ່ອນຂອງພວກຕໍ່ຕ້ານຣັຖບາລ. ດັ່ງນັ້ນ ຣັຖບາລວຽດນາມເໜືອ ຈຶ່ງ ໄດ້ສັ່ງປະຊາໄປຖາກຖາງປ່າໄມ້ໃນລາວ ເພື່ອຕັດເອົາໄມ້ທຸກຊນິດໄປໃຊ້ເປັນປະໂຍຊນ໌ ຫລືເຮັດຟືນດັງ ໄຟໃຫ້ປະຊາຊົນວຽດນາມເໜືອ. ການທຳຣ້າຍປ່າ ເຮັດໃຫ້ປະເທສລາວເປົ່າແປນ  ພ້ອມທັງສ້າງຄວາມແຫ້ງແລ້ງໃນພາກພື້ນດິນດັ່ງກ່າວ. ຕັ້ງແຕ່ ປີ 2006 ເປັນຕົ້ນມາ, ຢູ່ໃນປະເທສລາວ ໄດ້ເກີດເຫຕການຕ່າງໆຂຶ້ນ ທີ່ສໍ່ໃຫ້ເຫັນແຈ້ງວ່າວຽດນາມເໜືອຄອມມຸຍນິສຕ໌ ໄດ້ກືນກິນປະເທສລາວ ຕລອດວົງການຕ່າງໆຂອງລາວແດງ ເພາະມີນັກສືບສອດແນມວຽດນາມເໜືອ ເຂົ້າໄປສິ້ງຊອມກິຈການພາຍໃນທຸກໆການຈັດຕັ້ງໜ່ວຍການປົກຄອງຂອງລາວທັງໝົດ ແມ້ແຕ່ຄົນຫາບເຄື່ອງຂາຍຢູ່ຕາມຖນົນ, ຄົນຮັບເໝົາກໍ່ສ້າງ ກໍ່ລ້ວນແລ້ວແຕ່ເປັນນັກສືບສອດແນມຂອງວຽດນາມຄອມມຸຍນິສຕ໌ ທັງນັ້ນ. ສ່ວນເຈົ້າໜ້າທີ່ຕຳຣວຈລາວແດງ ແລະທະຫາຣກອງຫລອນນັ້ນ ພຽງແຕ່ເປັນທາສ ຊອກແຕ່ຄາບຂ່າວຂອງຊາຕຕົວເອງໄປໃຫ້ແກວເທົ່ານັ້ນ.

ຣັຖບາລລາວແດງບໍ່ໄດ້ເອົາໃຈໃສ່ການປົກຄອງປະຊາຊົນລາວຂອງຕົນເລີຍ ປະປ່ອຍຕາມອະນາຖາ ຫາກິນແບບຄົນຂໍທານ, ສ່ວນຫລາຍໄດ້ໜີອອກໄປຫາຮັບຈ້າງເປັນກູລີຢູ່ປະເທສໃກ້ຄຽງ ຫລື ລໍຄອຍແຕ່ການສົ່ງເງິນຈາກພີ່ນ້ອງລູກຫລານຢູ່ຕ່າງປະເທສ ຝາກໄປລ້ຽງດູ ໄດ້ກິນພໍສືບມື້ສືບວັນຕໍ່ໄປ. ພວກເຍົາວະຊົນລາວ ກັບກາຍເປັນຄົນຂາດຜູ້ດູແລ ແລະບໍ່ມີການຮ່ຳຮຽນສຶກສາຫຍັງ ຫລາຍຄົນຈຶ່ງກາຍເປັນເດັກເກເລ, ສູບຢາ ກິນຢາເສພຕິດ. ອັນນີ້ແມ່ນແຜນເພື່ອດັບສູນເຊື້ອຊາຕລາວໃຫ້ໄວຂື້ນ, ປະບ່ອນວ່າງໄວ້ໃຫ້ ຄົນແກວມາແທນ. ບົດຄວາມທີ່ຂຽນຢູ່ຂ້າງບົນນີ້ ມາຈາກຜູ້ທີ່ມີຄວາມຮູ້ສຶກ ຮັກປະຊາຊົນລາວ ທີ່ຢາກເລົ່າຄວາມຈິງຂອງເຫຕການທີ່ເກີດຂຶ້ນຢູ່ລາວ ໃຫ້ຄົນລາວຮູ້. ທ່ານຜູ້ນັ້ນຄືທ່ານພັນເອກ ແມສນິເອ (Col. Max Mesnier).

ຝຣັ່ງໄດ້ເລື່ອນຊັ້ນໃຫ້ ຣ.ອ. ວ່າງປາວ ຂຶ້ນເປັນພັນຕຣີ ແລ້ວກາງເດືອນມີນາ (March) ປີ 1954 ໃຫ້ນຳກຳລັງທະຫາຣຣາບອາກາສແລະສາມກອງພັນກອມມັງໂດ ກັບໄປພັກຜ່ອນຢູ່ທີ່ຊຽງໄຂ ປະມານໜຶ່ງເດືອນ. ໃນທ້າຍເດືອນເມສາ April 1954, ຝຣັ່ງເສສໄດ້ຕຽມກຳລັງທະຫາຣດັ່ງນີ້: ສອງກອງພັນທະຫາຣຣາບອາກາສເຜົ່າມົ້ງ ແລະສອງກອງພັນກອມມັງໂດເຜົ່າມົ້ງ; ສາມກອງພັນທະຫາຣລາວ, ສອງ ກອງພັນທະຫາຣປະສົມຫລາຍຊາຕຂອງຝຣັ່ງເສສ ແລະໜຶ່ງກອງພັນປະສົມເຜົ່າລາວແລະເຜົ່າມົ້ງ ໄປຈາກຫລວງພຣະບາງ ຣວມທັງໝົດເປັນໜຶ່ງກອງພົນ ບັງຄັບບັນຊາໂດຍທ່ານ ພ.ຕ. ວ່າງປາວ; ໄດ້ເຄື່ອນ ຈາກລາດບວກ ໃກ້ຊຽງໄຂ ໄປຫາພູວຽງ, ຂ້າມແມ່ນ້ຳຄັ້ງຄາວ-ປົງທາ-ນາຄັງ-ຊຳໃຕ້ ໃກ້ຈະເຖິງພູເລີຍ ເທົ່ານັ້ນ.ດຽນບຽນຝູ ໄດ້ຕົກໃຫ້ສັດຕຣູຄອມມຸຍນິສຕ໌ວຽດນາມເໜືອກ່ອນ ໃນເດືອນພຶສພາ (May) ວັນທີ່ 7, 1954. ກ່ອນຈະເລີ່ມຕັ້ງຄ້າຍຢູ່ດຽນບຽນຝູນັ້ນ, ທ່ານໄອເຊັນຮາວເວີ (Dwight D. Eisenhower) ໄດ້ເຂົ້າ ຮັບ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໜ້າທີ່ເປັນປະທານາທິບໍດີສະຫາຣັຖ ໃນຕົ້ນປີ 1953. ທ່ານໄດ້ກ່າວວ່າ: *"ຫາກເມືອງລາວເສັຍ ກໍເທົ່າກັບເປີດປະຕູໃຫ້ຄອມມູຍນິສຕ໌ ເຂົ້າເອເຊັຍຕາວັນອອກສ່ຽງໃຕ້ ແລະອິນເດັຍ."* ຣັຖບາລຝຣັ່ງເສສ ແລະ ສະຫາຣັຖ ຈຶ່ງໄດ້ຕົກລົງສັນຍາວ່າ ຈະຮ່ວມມືກັນໃຫ້ບິດຮຽນແກ່ຄອມມູຍນິສຕ໌, ເພາະເວລາ ນັ້ນ ຄອມມູຍນິສຕ໌ຢູ່ໃນພາຄພື້ນເອເຊັຍ ກຳລັງຂະຫຍາຍຕົວໄປສູ່ໃນຂັ້ນຮ້າຍແຮງທີ່ສຸດ. ແຕ່ສະຫາຣັຖກັບ ຖືກຫລອກ ວ່າການຕໍ່ສູ້ວຽດນາມເໜືອ ເປັນສິ່ງທີ່ຂັດກັບນະໂຍບາຍຂອງສະຫາຣັຖ ທີ່ວ່າບໍ່ຄວນຊ່ວຍ ຝ່າຍໃດຝ່າຍໜຶ່ງ ຫລືປະເທສໃດປະເທສໜຶ່ງ ໄປໂຈມຕີປະເທສອື່ນ ເພື່ອຢຶດຄອງປະເທສນັ້ນ ເປັນ ທົວເມືອງຂຶ້ນ. ເສິກວຽດນາມ ແມ່ນການໄປຊ່ວຍຝຣັ່ງເສສຍຶດປະເທສວຽດນາມ, ລາວແລະຂະເມັນ ເປັນ ທົວເມືອງຂຶ້ນຂອງຝຣັ່ງເສສ.




*<u>ຮູບທີ່ 32</u>. ທ່ານ ພ.ທ. ສັງ, ທ່ານ ພ.ຕ. ວ່າງປາວ, ເຈົ້າສາຍຄຳ ສຸທະກະກຸມານ ແລະ ພຍາຕູ້ບີ ລີຟູງ ກຳລັງກວດ ແລະ ຢັ້ງມຢາມ ກອງພັນ ທະຫານ ກອມມັງໂດ ເຜົ່າມົ້ງ ທີ່ຕຽມພ້ອມ ອອກເດີນທາງໄປໜູນຫລັງ ຄ້າຍດຽນບຽນຟູ ຢູ່ລາດບວກ ແຂວງຊຽງຂວາງ ທາງດ້ານຕາວັນຕົກ ຂັງໄຂ ແຂວງຊຽງຂວາງໃນທ້າຍເດືອນເມສາປີ 1954.*

ສະຫາຣັຖຈຶ່ງພຍາຍາມຕິດຕໍ່ໂຮຈິມິນ ບໍ່ໃຫ້ໂຈມຕີດຽນບຽນຟູ ໄດ້ຈັດໃຫ້ມີການເຈຣະຈາຂຶ້ນຢູ່ທີ່ ເຈນີວາ ປະເທສຊຸຍເຊີແລນ ແລະ ໄດ້ນັດປະຊຸມໃສ່ເດືອນພຶດສະພາ (May) ວັນທີ່ 21, 1954. ແຕ່ໂຮຈິມິນ ແລະ ຝ່າຍໂລກ ຄ.ມ.ນ. ຕ້ອງການອຳນາຕຝ່າຍທະຫາຣແລະການເມືອງ ໄດ້ສວຍໂອກາສນີ້ ວາງແຜນໂຈມຕີຝຣັ່ງເສສ ໃຫ້ແຕກກ່ອນວັນກຳນົດນັດປະຊຸມ ເພື່ອຫວັງສ້າງອິທິພົນຂອງຄອມມູຍນິສຕ໌ ໃຫ້ດັງໄປທົ່ວໂລກ. ສະຫາຣັຖໃດ້ປ່ອຍໃຫ້ຝຣັ່ງຕໍ່ສູ້ຝ່າຍດຽວກັບຄອມມູຍນິສຕ໌ (ທີ່ມີຫລາຍປະເທສຮ່ວມກັນຕໍ່ສູ້ຝຣັ່ງເສສ).


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນຂນະທີ່ກອງທະຫານວຽດມິນຕຽມກຳລັງເຂົ້າບຸກໂຈມຕີຄ້າຍທະຫານຝຣັ່ງເສສຢູ່ດຽນບຽນຝູນັ້ນ, ໂຮຈິມິນໄດ້ຊາບຂ່າວວ່າ "ແມ່ນພັນຕຣີ ວ່າງປາວ ເປັນຜູ້ບັນຊາການ ກອງພົນທະຫານເຜົ່າມົ້ງລ້ອນໆ, ໄດ້ເຄື່ອນກຳລັງພົນໄປໜູນຫລັງກອງທັພຝຣັ່ງເສສທີ່ດຽນບຽນຝູ. ໂຮຈິມິນຈຶ່ງມີຄວາມວິຕົກກັງວົນ ໄດ້ເລັ່ງໃຫ້ກອງທັພຂອງຕົນ ທຸ່ມເທກຳລັງຈິດ ກຳລັງກາຍ ບຸກໂຈມຕີກອງທັພຝຣັ່ງເສສ ຢູ່ໃນເຂດບໍຣິເວນດຽນບຽນຝູ ໃຫ້ແຕກກ່ອນກຳລັງຂອງພັນຕຣີ ວ່າງປາວຈະໄປເຖີງ.





*ຮູບທີ່ 33 (ຂ້າງຊ້າຍ). ກອງພັນປະສົມຕ່າງດ້າວຝຣັ່ງເສສບັນຊາໂດຍສິບເອກ ເລີເກີ (Sergent LEUGEUX). ຮູບທີ່ 34 (ຂ້າງຂວາ). ກອງພັນປະສົມຕ່າງດ້າວຂອງຝຣັ່ງເສສ ບັນຊາໂດຍສິບເອກປາຣີ (Sergent PARIS)*

ການສູນເສັຍສົງຄາມຢູ່ດຽນບຽນຝູ ໄດ້ສ້າງໃຫ້ໂລກຄອມມຸຍນິສ ດັງກອ້ງໄປທົ່ວໂລກ. ສະຫາຣັຖຈຶ່ງຮູ້ ວ່າໂຮຈິມິນ ບໍ່ມີຄວາມຈິງໃຈກັບສະຫາຣັຖ ໃນການເຈຣະຈາສັນຕິພາບໃນອິນດູຈີນ ແລະໃນກອງປະຊູມ ທີ່ໄດ້ຈັດຂຶ້ນ ໃນວັນທີ່ 20 ເດືອນ ກໍຣະກະດາ (July) 1954 ຢູ່ທີ່ເຈນີວາ. ເພາະສນັ້ນ ສະຫາຣັຖຈຶ່ງບໍ່ເອົາໃຈໃສ່ແລະບໍ່ຮ່ວມໃນການເຊັນສັນຍາ ມີແຕ່ສິບສາມ (13) ປະເທສອື່ນໆເຊັນ.

ໃນປີ 1954, ທ່ານຕູ້ເລັ້ຍ ລີຟຸງໄດ້ກັບໄປພັກຜ່ອນຢູ່ຊຽງຂວາງ ເພື່ອຕຽມຮັບສະມັກເລືອກຕັ້ງເປັນຜູ້ແທນຣາຊດອນແຂວງຊຽງຂວາງໃນຊຸດຕໍ່ໄປ. ທ່ານໄດ້ແຕ່ງງານໃໝ່ເປັນຄັ້ງທີ່ສອງ ກັບລູກລ້ຽງເຈົ້າເມືອງພວນເພື່ອຈຸດປະສົງຄ໌ ຢາກໄດ້ຄະແນນນິຍົມສຽງສ່ວນຫລາຍຈາກປະຊາຊົນລາວ ພາຍໃນແຂວງ ຊຽງຂວາງ. ທ່ານຕູ້ເລັ້ຍ ລີຟຸງ ເປັນບຸກຄົນສຳຄັນ ເປັນຄົນສລາດ ມີສະຕິປັນຍາ ປັບປູງປະຊາຊົນ ຫລາຍຢ່າງ. ເຖີງຈະແມ່ນເວລາກັບມາພັກຜອ່ນຂອງທ່ານກໍ່ຕາມ, ແຕ່ທ່ານກໍຍັງໄດ້ເອົາໃຈໃສ່ປຸກຣະດົມ ເອີ້ນເອົາເຍົາ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ວະຊິນເຜົ່າມົ້ງແລະເຜົ່າລາວ ໃຫ້ໄປເຂົ້າໂຮງຮຽນຮຽນວິຊາ ປັບປຸງຄອບຄົວ ແລະດ້ານສຸຂພາບອານາໄມ. ແຕ່ກໍບໍ່ໄດ້ຜົລເທົ່າທີ່ຄວນ ເພາະຍັງຂາດຄຣູຝຶກສອນ ແລະອຸປະກອນການສອນ ຫລາຍຢ່າງ.

ໃນປີ 1957 ທ່ານຕູ້ເລັ້ຍ ລີຟຸງ ໄດ້ຖືກເຊີນໃຫ້ຍົກຍ້າຍໄປປະຈຳການຢູ່ໃນນະຄອນວຽງຈັນທນ໌, ເພື່ອ ເປັນກັມມະການຮຽບຮຽງກົດໝາຍແຫ່ງພຣະຣາຊອານາຈັກລາວ. ທ່ານໄດ້ຢູ່ໃນນະຄອນວຽງຈັນທນ໌ ຈົນກະທັ່ງມື້ອົພຍົບໄປຢູ່ປະເທສຝຣັ່ງເສສ ແລະໄດ້ເສັຍຊີວິດຢູ່ທີ່ນັ້ນໃນປີ 1996. ໃນເວລາຢູ່ວຽງຈັນທນ໌ ທ່ານຕູ້ເລັ້ຍໄດ້ຮັບເອົາລູກຊາຍຂອງລໍໄຝດາງ ຊື່ ລໍ ຊາວ (Lauj Xauv) ໄປຢູ່ນຳ ຈົນຮອດ ປີ 1958 ຈຶ່ງໄດ້ກັບໄປຊຽງຂວາງ ແລະໄດ້ແຕງງານກັບນາງໄຊເຮີ ຢູ່ດົງດ່ານ. ໃນວັນທີ່ 18 ເດືອນ ພຶດສະພາ (May) ປີ 1959, ລໍ ຊາວ ແລະ ຄນະມົ້ງລໍ ໄດ້ຕ່າວກັບໄປວຽດນາມ ບໍ່ຍອມເຂົ້າຮ່ວມຣັຖບາລຝ່າຍ ວຽງຈັນທນ໌.

ພຣະຍາດຳຣົງ ຣິທິໄກ ຕູ້ບີ ລີຟຸງ (ເຊີນອ່ານໜ້າຊີວະປະວັຕຫຍໍ້ຂອງເພິ່ນ) ບໍ່ໄດ້ອອກໜີຈາກປະເທສດ້ວຍເຫຕວ່າ ທ່ານໄດ້ໃຫ້ຄຳສາບານຮ່ວມກັນກັບສະເດັຈເຈົ້າສຸວັນນາພູມາ ວ່າ: ຕ້ອງຢູ່ຮ່ວມສຸຂຮ່ວມທຸກຂ໌ດ້ວຍກັນ, ຕາຍກໍຍອມຕາຍດ້ວຍກັນ. ແຕ່ເຈົ້າສຸວັນນາພູມາ ບໍ່ໄດ້ຖືກຈັບກຸມໄປຂັງຄຸກ, ສເດັຈໄດ້ໄປພັກຢູ່ຢ່າງງຽບໆນຳນ້ອງຊາຍ ສະເດັຈເຈົ້າສຸພານຸວົງສ໌ ທີ່ນະຄອນວຽງຈັນທນ໌. ບາງຄົນຍັງເຊື່ອວ່າ ສະເດັຈທັງສອງ ເປັນຜູ້ທີ່ໄດ້ສນັບສນູນແນວລາວຮັກຊາຕ ໃນການມອບປະເທສລາວ ໃຫ້ຄອມມຸຍ ນິສຕ໌ວຽດນາມເໜືອ. ຍ້ອນວ່າສເດັຈເຈົ້າສຸວັນນາພູມາ ອ່ານແຜນການຂອງ ຄ.ມ.ນ. ຕື້ນໂພດໄປ ການ ເມືອງຂອງສະເດັຈຢູ່ໃນລາວ ຈຶ່ງໄດ້ແຕກເປັນສາມຝ່າຍລາວ ຕໍ່ສູ້ແລະຂ້າກັນເອງ. ສຸດທ້າຍ ກໍ່ແມ່ນ ຄ.ມ.ນ. ວຽດນາມເໜືອເປັນຜູ້ໄຊຊນະ ຈຶ່ງຍຶດເມືອງລາວເປັນຫົວເມືອງຂື້ນຂອງວຽດນາມເໜືອໄດ້.

ໃນທ້າຍເດືອນພຶສພາ (May) 1954, ທາງການຝຣັ່ງເສສໄດ້ສັ່ງໃຫ້ກຳລັງທະຫາຣ ທີ່ໄປຈາກຫລວງ ພຣະບາງ ໃຫ້ຍົກຍ້າຍເພື່ອກັບຄືນໄປປະຈຳສຖານທີ່ຕັ້ງເດີມຢູ່ຫລວງພຣະບາງ. ກຳລັງທະຫາຣຣາບອາ ກາສ ແລະກອງພັນກອມມັງໂດ ທີ່ຢູ່ພາຍໃຕ້ການບັງຄັບບັນຊາຂອງພັນຕຣີ ວ່າງປາວ ໃຫ້ໄປປະຈຳ ຢູ່ຊັງໄຂ. ແຕ່ບໍ່ດົນ ກໍໄດ້ຍົກຍ້າຍໄປຕັ້ງຢູ່ທີ່ຄ້າຍໜອງແຮດ ເພື່ອປ້ອງກັນຊາຍແດນ ລາວ/ວຽດນາມຕໍ່ໄປ. ສ່ວນກອງທະຫາຣປະສົມຝຣັ່ງເສສ ກໍໄດ້ກັບໄປປະເທສຝຣັ່ງເສສ.

ໃນປີ 1955, ລາວສອງຝ່າຍໄດ້ລີ້ເຣີ່ມເຈຣະຈາເຕົ້າໂຮມລາວສອງຝ່າຍ. ໃນວັນທີ່ 10 ເດືອນມິຖຸນາ (June) ປີ 1956, ສະພາຜູ້ແທນຣາຊດອນໄດ້ເປີດສະພາສມັຍວິສາມັນຂຶ້ນ ເພື່ອພິຈາຣະນາເຣື່ອງ ການຈັດຕັ້ງ ແລະການແບ່ງປັນໜ້າທີ່ໃຫ້ສອງຝ່າຍ. ໃນວັນທີ່ 1-8 ເດືອນສິງຫາ (August) ປີ 1956, ສະເດັຈເຈົ້າສຸພານຸວົງສ໌ ໄດ້ນຳພາຄນະກັມມະການຄນະໜຶ່ງ ເຂົ້າມາເຈຣະຈາກັບຝ່າຍຂວາຢູ່ນະຄອນວຽງຈັນທນ໌


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*<u>ຮູບທີ່ 35</u>. ການເຕົ້າໂຮມຄັ້ງທີ່ໜຶ່ງຂອງລາວສອງຝ່າຍນີ້ແມ່ນການໂຮມກັນລະຫວ່າງຝ່າຍ ລີ ແລະ ຝ່າຍລໍ ທີ່ມີການເມືອງແຕກຕ່າງກັນ ໃນສະໄມ 1939 ຫາ 1959. ຈາກຊ້າຍຫາຂວາ ສີ່ຄົນທາງໜ້າ ພຍະ ຕູ້ບີ ລີຟູງ; ທ່ານໄຟດາງລໍ; ທ່ານ ພ.ທ. ຕູ້ ຢາງ; ທ່ານ ຝູງລໍ. ແຖວສອງຈາກຊ້າຍ: ລອງເຈົ້າແຂວງ ຢົ້ວປາວ ຢາງ; ທ່ານເຈົ້າແຂວງ ຕູ້ຍ ຕຸນາລົມ ພໍ່ຂອງ ທ່ານໝໍຄຳເມີງ; ພັລຍາທ່ານ ຕູ້ບີ ລີຟູງ; ພັລຍາທ່ານໄຝດາງ ລໍ; ພັລຍາທ່ານ ຝູງ ລໍ; ທ່ານເຈົ້າເມືອງ ເຈັ່ງຊ້າງມົວ ພໍ່ຂອງທ່ານ ຕູມົວເລັ້ຍ; ແຖວທີ່ສາມຄົນທີ່ສາມ ແມ່ນ ນາຍໝໍລີດົວ ເສັຍຊີວິດຢູເມືອງໄທຍ໌ ຄົນຕໍ່ໄປຢູ່ຫລັງ ພັນລະຍພຍະຕູ້ບີ ແມ່ນທ້າວທົງໄຊໂກສີ ຫົວໜ້າໂຮງໄປສະນີ ແຂວງຊຽງ ຂວາງ  ຄົນທີ່ຢູ່ຫລັງທ່ານໄຟດາງລໍແມ່ນ ທ້າວເຊືອງ ສຸລິນທະວົງ ຫົວໜ້າປ່າໄມ້ຊຽງຂວາງ ຄົນຢູ່ຫລັງ ພ.ທ. ຕູ້ຢາບໍ່ຮູ້ ຄົນຕໍ່ໄປ ຢູ່ຫລັງທ່ານ ຝູງລໍແມ່ນ ທ່ານລີຄົວລີຟູງ. ແຖວສີ່ ຈາກຊ້າຍ ຄົນທີ່ໜຶ່ງແມ່ນທ່ານ ບູນມີ ທີບພະວົງ ພໍ່ຂອງ ພ.ອ. ສີສະສວັດ ຄົນທີ່ສອງ ເສື້ອສີດຳ ບໍ່ຮູ້ ຄົນຕໍ່ໄປນູ່ງເສື້ອສີຂາວແມ່ນທ່ານໜາວເຢັ່ງລີ, ຄົນຕໍ່ໄປທີ່ຖືໝວກສີດຳ ຄົນທີ່ສອງເທີງ ຫລັງທ່ານ ໄຟດາງລໍ ແມ່ນ ນາຍໝໍ ບລົງລີ; ຄົນທີ່ຢູ່ໃນຜ້າສີດຳທີ່ສອງຫລັງ ພ.ທ. ຕູ້ຢາແມ່ນ ທ້າວສີພັນ ສີຫານາດ  ຫົວໜ້າຄັງເງີນ ແຂວງຊຽງຂວາງ ເຫລືອນັ້ນ ບໍ່ຮູ້.*

ໃນວັນທີ່ 2 ເດືອນພຶສຈິກາ (November) ປີ 1957, ສອງຝ່າຍໄດ້ເຊັນສັນຍາຕົກລົງຮ່ວມ ກັນ ໃສ່ໃນວັນທີ່ 19 ເດືອນພຶສຈິກາ (November) ປີ 1957, ຈັດຕັ້ງຣັຖບາລປະສົມລາວສອງຝ່າຍ ເຂົ້າ ຮວມກັນຄັ້ງທີ່ໜຶ່ງ.

ສອງຝ່າຍຕົກລົງໃຫ້ຝ່າຍປະເທສລາວ ຄ.ມ.ນ. ສົ່ງກຳລັງໄປຕັ້ງຢູ່ດັ່ງນີ້:

- ສົ່ງລາວອິສສຣະໜຶ່ງກອງພັນ ຊຶ່ງສ່ວນຫລາຍປະກອບດ້ວຍຊູມຊົນເຜົ່າມົ້ງ ເຂົ້າໄປຕັ້ງຢູ່ທົ່ງໄຫຫີນ ແຂວງຊຽງຂວາງ (ພ.ທ. ຕູ້ຢາ ເປັນ ຜ.ບ. ກອງພັນ)


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ສິ່ງລາວອິສສຣະໜຶ່ງກອງພັນ ເຂົ້າໄປຕັ້ງຢູ່ຕົວເມືອງຊຳເໜືອ ແຂວງຫົວພັນ. ນອກຈາກນີ້ ໄດ້ຈັດໃຫ້ມີທະຫາຣລາວອິສສຣະ ຫລາຍກອງຮ້ອຍ ໄປຕັ້ງຢູ່ນະຄອນຫລວງວຽງຈັນທນ໌ ແລະໃນຕົວເມືອງຫລວງພຣະບາງ ຈັດສອງຕົວເມືອງນີ້ເປັນເຂຕເປັນກາງ ປອດທະຫາຣຂອງສອງຝ່າຍ.

ໃນເດືອນມີນາ 1958, ສອງຝ່າຍເລີ່ມມີຄວາມຂັດແຍ້ງກັນຄື ຝ່າຍປະເທສລາວໄດ້ເກີດຄວາມບໍ່ພໍໃຈ ໃນໜ້າທີ່ໆໄດ້ແບ່ງປັນໃຫ້, ບໍ່ຍອມເອົາສອງແຂວງ ທີ່ຢູ່ໃນການຍຶດຄອງ ແລະກຳລັງທະຫາຣລາວ ຄ.ມ.ນ. ເຂົ້າມາຮ່ວມກັບຝ່າຍຣັຖບາລວຽງຈັນທນ໌ ເພາະວ່າມີຫລາຍຢ່າງບໍ່ໄວ້ໃຈ. ເຈົ້າຊີວິດສີສະຫວ່າງ ວັທະນາ ຈຶ່ງໄດ້ວາງພຣະປະມາພິໄຕຣ ມອບຄວາມໄວ້ວາງໃຈໃຫ້ເຈົ້າສຸວັນນາພູມາ ປະກອບຣັຖບາລ ຊຸດໃໝ່ຂຶ້ນ ເພື່ອແກ້ໄຂບັນຫາທີ່ຄ້າງຄາຢູ່ ໂດຍໃຫ້ສເດັຈເຈົ້າສຸວັນນະພູມາເປັນນາຍົກ ຣັຖມົນຕຣີ ແລະໃຫ້ເຈົ້າສຸພານຸວົງສ໌ ເປັນຮອງນາຍົກຣັຖມົນຕຣີ. ເຖິງດັ່ງນັ້ນ ກໍຍັງມີບັນຫາຂໍ້ຂັດແຍ້ງກັນທາງການ ເມືອງຢູ່ຕໍ່ໄປຢ່າງບໍ່ສິ້ນສຸດ.

ຍ້ອນການເມືອງໄດ້ປ່ຽນແປງ ໃນປີ 1957 ພ.ຕ. ວ່າງປາວ ຈຶ່ງຖືກສົ່ງໄປປະຈຳການຢູ່ເມືອງເປີນ ແຂວງຫົວພັນ ເພື່ອປ້ອງກັນພາຄເໜືອຂອງປະເທສລາວ. ຝ່າຍຄອມມຸຍນິສຕ໌ລາວ ໃດ້ເຂົ້າຮ່ວມການຈັດຕັ້ງຣັຖບາລແຫ່ງພຣະຣາຊອານາຈັກລາວ. ໃນປີ 1959, ນາຍພົນພູມີໜໍ່ສວັນ ໄດ້ອອກຄຳສັ່ງ ຍົກຍ້າຍພັນຕຣີ ວ່າງ ປາວ ກັບໄປຊຽງຂວາງ. ໃນຕົ້ນປີ 1959 ພ.ຕ. ວ່າງປາວ ຈຶ່ງໄດ້ສັ່ງ ຣ.ອ. ລີປາວ ໄລ່ຕິດຕາມກອງພັນລາວອິສສຣະ ທີ່ໂຕນອອກຈາກທົ່ງໄຫຫີນ ໃນວັນທີ່ 18 ເມສາ ປີ 1959 ໂດຍແມ່ນນາຍພົນ ອ້ວນ ຣະຕິກຸນ ເປັນຜູ້ສັ່ງ ພ.ຕ. ວ່າງປາວ. ໃນປີ 1960 ນາຍພົນພູມີ ໜໍສວັນ ໄດ້ຕັ້ງ ພ.ຕ. ວ່າງປາວ ເປັນ ຜ.ບ. ຂອງກອງພັນຮັກສາສນາມບິນທົ່ງໄຫຫີນ, ຍ້ອນໄດ້ມີບັນຫາເກີດຂຶ້ນຫລາຍຢ່າງ. ສອງອາທິສ ຫລັງຈາກ ກອງແລ ປະຕິວັດຢູ່ວຽງຈັນທນ໌ ພ.ຕ. ວ່າງປາວ ຖືກຜູ້ຮອງລອບສັງຫາຣ ຢູ່ທົ່ງໄຫຫີນ ແຕ່ ທ່ານລອດ ໄປດ້ວຍຄວາມປອດພັຍ.

ໃນເດືອນພຶສຈິກາ (November) 1957, ຣ.ອ. ກອງແລໄດ້ຮັບໜ້າທີ່ເປັນຜູ້ອຳນວຍການໂຮງຮຽນ ໜ່ວຍກ້າຕາຍຢູ່ຄ້າຍຈິ່ນາຍໂມ້ ແຂວງວຽງຈັນທນ໌. ຣ.ອ. ກອງແລໄດ້ສວຍໂອກາດນີ້ ເຂົ້າໄປພົບສເດັຈເຈົ້າສຸພານຸວົງສ໌ທຸກໆຄືນ  (ຕາມທີ່ບັນທຶກໄວ້ໃນປຶ້ມວີຣະບຸຣຸດແຫ່ງແຜ່ນດິນລ້ານຊ້າງ ຊຽນໂດຍ ດວງໄຊ ຫລວງພາສີ ໜ້າ 49) ຢູ່ທີ່ບ້ານພັກຂອງສະເດັຈ ຢູ່ປາກປາສັກ ແຄມແມ່ນ້ຳຂອງ ຖນົນຊຸນບູລົມ ນະຄອນ ວຽງຈັນທນ໌.  ການຣັຖປະຫາຣໃນວັນທີ່ 9 ເດືອນສິງຫາ (August) ປີ 1960 ແລະ ການ ແຫກຄຸກ ຂອງສະເດັຈເຈົ້າສຸພານຸວົງສ໌ແລະພັກພວກ ສະແດງໃຫ້ເຫັນວ່າ ກອງແລອາຈມີສ່ວນຮ່ວມໃນ ການວາງແຜນ ຈຶ່ງມີການແຫກຄຸກອອກໄປໄດ້ຢ່າງສະບາຍ.  ນອກນັ້ນ ຍັງມີບັນຫາຕ່າງໆເກີດຂຶ້ນຢ່າງ ຕໍ່ເນື່ອງກັນໃນໄລຍະດັ່ງກ່າວ. ບັນຫາສຳຄັນທີ່ຄວນຖາມນາຍພົນກອງແລ (ຣ.ອ. ກອງແລ) ທັ້ງໆທີ່ ເປັນຜູ້ສນັບ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສນຸນເຈົ້າສຸພານຸວົງສ໌ຂນາດນັ້ນ ເປັນຫັຍງຈຶ່ງປິ້ນຄືນໄປຕໍ່ສູ້ກັບລາວ ຄ.ມ.ນ. ອີກ? ເປັນດ້ວຍ ເຫຕໃດແທ້ ຈຶ່ງແຕກອອກຈາກທົ່ງໄຫຫີນ ໄປໃສ່ເມືອງພົ້ນ, ແຕກເມືອງພົ້ນ ໄປໃສ່ເມືອງສຸຍ ແລ້ວ ສຸດທ້າຍ ໄປຢູ່ກາສີ ແຂວງວຽງຈັນທນ໌ ກໍຍັງຢູ່ບໍ່ໄດ້. ຫລັງຈາກທ່ານກອງແລໄດ້ອົພະຍົບໄປຢູ່ຕ່າງປະ ເທສ ກໍາລັງຝ່າຍກາງ ຈຶ່ງເຫລືອແຕ່ຊື່. ຂ້າຣາຊການ, ທະຫາຣ, ຕໍາຣວຈ ຂອງລາວ ສ່ວນຫລາຍ ບໍ່ຮູ້ ເລ່ຫລ່ຽມຂອງຄອມມຸຍ ນິສຕ໌ ດີພໍ ຈຶ່ງຕົກເປັນເຫຍື່ອຂອງ ຄ.ມ.ນ. ຫລອກໃຊ້.



*<u>ຮູບທີ່ 36.</u> ຣ້ອຍເອກ ກອງແລ ປີ 1957*
*ແມ່ນຕອນ ກອງແລເຂົ້າພົບສຸພານຸວົງທຸກຄືນລັບໆ*



*<u>ຮູບທີ່ 37</u>. ເຈົ້າສຸວັນນາພູມມາ ແລະ ເຈົ້າສຸພານຸວົງ ປີ 1957*
*ແມ່ນຕອນ ເຂົ້າມາຮ່ວມຣັຖບານ ເພື່ອຈອບອວຍເອົາລູກນ້ອງ*

ໃນເດືອນທັນວາ (December) 1957, ມີທະຫາຣຄນະປະເທສລາວໜຶ່ງກອງພັນຕັ້ງຢູ່ທົ່ງໄຫຫີນ, ໜຶ່ງ ກອງພັນຕັ້ງຢູ່ແຂວງຫົວພັນ, 250 ຄົນ ຕັ້ງຢູ່ນະຄອນວຽງຈັນທນ໌ ແລະ 250 ຄົນຕັ້ງຢູ່ໃນນະຄອນ ຫລວງ ພຣະບາງ. ເລີ່ມຕົ້ນປີ 1958 ສອງຝ່າຍໄດ້ມີບັນຫາເກີດຂຶ້ນຫລາຍຢ່າງ. ຝ່າຍລາວຄອມມຸຍນິສຕ໌ ອ້າງ ວ່າໃຫ້ຍົດຊັ້ນບໍ່ມີຄວາມເປັນທັມ ແລະບໍ່ໄດ້ເຮັດຕາມການຕົກລົງໄວ້ ມີເຫລ່ລ່ຽມຫລາຍແນວໂພດ. ໃນ ວັນທີ່ 14 ເດືອນພຶດສພາ (May) ປີ 1959, ນາຍພົນອວັນ ຣາທິກຸລ ໄດ້ບິນຂຶ້ນໄປຊຽງຂວາງ ເພື່ອທໍາ ຄວາມເຂົ້າໃຈກັບຝ່າຍປະເທສລາວຢູ່ທົ່ງໄຫຫີນ ແຕ່ກັບຖືກຈີ້ແລະບໍ່ຍອມໃຫ້ເຂົ້າພົບ. ນາຍພົນ ອ້ວນ ຈຶ່ງໄດ້ບິນກັບວຽງຈັນທນ໌ ແລ້ວທ່ານໄດ້ສັ່ງໃຫ້ທະຫາຣຝ່າຍຕົນສາມກອງພັນ ປິດລ້ອມ ກອງພັນ 2 ທີ່ ທົ່ງໄຫຫີນ ນໍາພາໂດຽ ພ.ທ. ຕູ້ຢາ ໃນວັນທີ່ 17 ເດືອນພຶດສພາ (May) 1959, ຝ່າຍປະເທສລາວ ໄດ້ ໃຫ້ຄໍາຕອບວ່າ: ຍອມເຂົ້າຮ່ວມກັບຝ່າຍວຽງຈັນທນ໌ ພາຍໃນ 24 ຊົ່ວໂມງ. ຍ້ອນຄໍາຕອບນີ້ ຝ່າຍວຽງ



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຈັນທນ໌ ຈຶ່ງບໍ່ໄດ້ເອົາໃຈໃສ່ເສັ່ງຄັດນຳການເວັນຍາມ.  ໃນວັນທີ່ 18 ເດືອນພຶດສພາ (May) 1959, ເວລາທ່ຽງຄືນ ຝົນຕົກໜັກ ກອງພັນ 2 ທີ່ທັ່ງໄຫຫີນໄດ້ໂຕນໜີເຂົ້າປ່າໄປ.  ຝ່າຍວຽງຈັນທນ໌ ບໍ່ໄດ້ຮູ້ເມື່ອ. ນາຍພົນອ້ວນໄດ້ສັ່ງທະຫາຣຫລາຍກອງພັນຕິດຕາມ ແຕ່ບໍ່ພົບ. ນາຍພົນອ້ວນຈຶ່ງໄດ້ສັ່ງ ພ.ຕ. ວ່າງປາວ ສົ່ງທະຫາຣ ມົ້ງໄລ່ຕິດຕາມ. ຜູ້ນຳພາການຕິດຕາມຄັ້ງນີ້ແມ່ນ ຣ.ອ. ລີປາວ ຈຶ່ງໄດ້ ໄປພົບຢູ່ ໄກ້ໆເມືອງ ໝອກ ໄດ້ມີການຕໍ່ສູ້ກັນ ເລັກນ້ອຍ ພາໃຫ້ຕູ້ຢາ ຜ.ບ.  ກອງພັນທີ່ 2 ຖືກບາດເຈັບທີ່ ຂາ.   ຣ.ອ. ລີປາວ ໄດ້ລາຍງານໃຫ້ ພ.ຕ. ວ່າງປາວ ຮູ້ວ່າ; ກອງພັນປະເທສລາວ ມີແຕ່ມົ້ງສ່ວນຫລາຍ ແມ່ນ ແຕ່ເດັກນ້ອຍ ແລະ ແມ່ຍິງ ສ່ວນຫລາຍຕິດຕາມຢູ່ນຳ. ພ.ຕ. ວ່າງປາວ ໄດ້ສັ່ງໃຫ້ ຣ.ອ. ລີປາວ ຖອຍ ແລ້ວ ປ່ອຍໃຫ້ ຜ່ານໄປ. ສຳຫລັບກອງພັນປະເທສລາວທີ່ເມືອງຊຳເໜືອ ພວກເຂົາບໍ່ໄດ້ໂຕນໜີ ມີປະມານ 100 ກວ່າຄົນ ແມ່ນຊົນເຜົ່າອື່ນໆໄດ້ວາງອາວຸທ ແລະໄດ້ກັບບ້ານ. ສ່ວນໜຶ່ງທີ່ເຫລືອ ມີຫລາຍກວ່າ 300 ຄົນແມ່ນເຜົ່າ ລາວລຸ່ມ ຝ່າຍຣັຖບາລວຽງຈັນທນ໌ໄດ້ຂົນໄປໃສ່ແຂວງສາຣະວັນ  ຈັດຕັ້ງເປັນກອງພັນໃໝ່ ຂຶ້ນ ບໍ່ຮູ້ຂ່າວ ອີກ.

ໃນໄລຍະດັ່ງກ່າວນີ້, ທ່ານຕູ້ເຢີ ລີຝຸງ, ທ່ານຕູ້ເລັ້ຍ ລີຝຸງ ແລະທ່ານຕູ້ບີ ລີຝຸງ ຢູ່ນະຄອນວຽງຈັນທນ໌ ເປັນ ຄນະຜູ້ແທນຣາຊດອນ ປະຕິບັດໜ້າທີ່ຢູ່ສະພາຜູ້ແທນຣາຊດອນ. ສະພາບການຣະຫວ່າງສອງຝ່າຍ ບໍ່ມີ ທັ່ງຮ້າຍແຮງ ເຖິງມີກໍເລັກນ້ອຍບໍ່ຮູນແຮງ ທັງສອງຝ່າຍຍັງມີການຕິດຕໍ່ຫາກັນຢູ່ ໂດຍອາໄສຄນະ ກັມມະ ການຢຸດຍິງສາກົລ ເປັນຄົນກາງ ເພື່ອປະຕິບັດຕາມສັນຍາສະງົບເສິກໃນອິນດູຈີນ mujg-aodao16J ທີ່ເຈນີວາ ໃນປີ 1954.

## ວຽດນາມຖືກແບ່ງແຍກເປັນສອງພາຄ

ໃນປີ 1954, ປະເທສວຽດນາມໄດ້ແບ່ງອອກເປັນສອງພາຄຄື:  ພາຄເໜືອ ແລະ ພາຄໃຕ້.

- ພາຄເໜືອ ເອີ້ນວ່າສາທາຣະນະຣັຖສັງຄົມນິຍົມວຽດນາມ ໃຊ້ລັທທິການປົກຄອງແບບສັງຄົມນິ ຍົມຄອມມຸຍນິສຕ໌ ທ່ານໂຮຈິມິນເປັນປະທານປະເທສ.  ເມືອງເອກຕັ້ງຢູ່ຮ່າໂນ້ຍ (Hanoi ),

- ພາຄໃຕ້ ເອີ້ນວ່າສາທາຣະນະຣັຖວຽດນາມ ໃຊ້ຣະບອບການປົກຄອງແບບເສຣີປະຊາທິປະ ໄຕຍ, ສົມເດັຈພຣະເຈົ້າຈັກກະພັຕບາວດາຍ ທຣົງຄອງປະເທສ, ເມືອງເອກຕັ້ງຢູ່ໄຊງ່ອນ (Saigon) ປະຈຸບັນເອີ້ນວ່າ ນະຄອນໂຮຈິມິນ (Ho-Chi-Minh City).


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຂດແບ່ງປະເທສ ຖືຕາມ ເສັ້ນຂນານທີ່ 17, ດ້ານເໜືອ ຕິດກັບເມືອງວິ້ນລິນ (Vinh Linh), ແລະດ້ານໃຕ້ ແມ່ນ ເມືອງກວາງຕຣີ (Quang-Tri).

ໃນປີ 1955 ໂຮຈິມິນໄດ້ວາງແຜນເພື່ອຕໍ່ສູ້ ແລະ ດຶງວຽດນາມທັງສອງພາຄມາເປັນອັນດຽວ. ປະເທສ ລາວ ຈຶ່ງໄດ້ຖືກກອງທະຫາຣຂອງ ວຽດນາມເໜືອ ລຸກລ້ຳດິນແດນ, ໂດຍໄດ້ໃຊ້ລາວຄອມມຸຍນິສຕ໌ ເປັນສາກ ບັງໜ້າ ເພື່ອໃຫ້ໄດ້ໃຊ້ດິນລາວ ເປັນທາງຜ່ານລົງໄປສູ່ວຽດນາມໃຕ້ ເພື່ອກອບກູ້ຊາຕ ຫອັນ ໂຮມ ວຽດນາມ. ກອງທະຫາຣວຽດນາມເໜືອຈຶ່ງໄດ້ສ້າງຖນົນຜ່ານດິນລາວ ແຕ່ເສັ້ນຂນານທີ່ 17 ໄປສູ່ ແຂວງ ສາ ຣະວັນ ແລະ ກວາງຕຣີ ລາມໄປເຖິງຊາຍແດນ ຂເມນ ແລະ ໄດ້ໃສ່ຊື່ວ່າ ດອນ (Doan 559) ຫລື ທາງ ໂຮຈິມິນ ໄດ້ເລີ່ມຕັ້ງແຕ່ ປີ 1959 ຕລອດມາ ແລະໄດ້ຍຶດຊາຍແດນລາວແຕ່ເໜືອຕລອດໃຕ້ ໃຊ້ເປັນທີ່ ລີ້ຊ້ອນ ແລະ ຝຶກກຳລັງທະຫາຣ ຂອງຄອມມຸຍນິສຕ໌ ວຽດນາມ. ໃນປະຈຸບັນ ວຽດນາມ ຄອມມຸຍນິສຕ໌ໄດ້ ຍຶດໜ້າດິນເບື້ອງຕິດກັບວຽດນາມ ພ້ອມເສັ້ນທາງໂຮຈິມິນນີ້ ໄປເປັນກັມະຊິດຂອງຕົນ ໂດຍບໍ່ມີຜູ້ໃດ ຕໍ່ວ່າໄດ້.

ຫລັງຈາກວຽດນາມໄດ້ຮັບເອກະຣາຊຈາກປະເທສຝຣັ່ງເສສ ຈັກກະພັຕບາວດາຍ ໄດ້ປະກາສລາອອກ ຈາກບັນລັງ, ໂດຍອ້າງເຫຕຜົນວ່າ ປະເທສຂອງຕົນຍັງເປັນຫົວເມືອງຂຶ້ນຂອງຝຣັ່ງເສສຢູ່ເໝືອນເດີມ ແລ້ວໄດ້ໄປພົບກັບໂຮຈິມິນ ເຮັດໃຫ້ປະຊາຊົນວຽດນາມໃຕ້ ຕ້ອງເລືອກເອົາທ່ານໂງດິນດຽມ ຂຶ້ນເປັນ ປະທານປະເທສແທນ. ຈັກກະພັຕບາວດາຍຢູ່ບໍ່ໄດ້ ຈຶ່ງໄດ້ໂຕນໄປລີ້ໄພ້ຍການເມືອງຢູ່ປະເທສຝຣັ່ງເສສ, ແລະໄດ້ສິ້ນພຣະຊົນ (ເສັຍຊີວິຕ) ຢູ່ທີ່ນັ້ນ ໃນວັນທີ່ 31 ກໍຣະກະດາ (July) 1997 ທີ່ກຸງປາຣີສ.

ພາຍຫລັງຄອມມຸຍນິສຕ໌ໄດ້ໄຊ້ຍຊນະກອງທັພຝຣັ່ງເສສຢູ່ດຽນບຽນຟູແລ້ວ ໃນວັນທີ່ 6 ເດືອນມັງກອນ (January) 1956, ລາວອິສສຣະໄດ້ປ່ຽນຊື່ພັຄ ມາເປັນ “ຄນະປະເທສລາວ”.

ໃນປີ 1957, ສອງຝ່າຍໄດ້ເຂົ້າຮ່ວມກັນ ແຕ່ໄດ້ເກີດບັນຫລາຍຢ່າງຂຶ້ນ ຈຶ່ງເຮັດໃຫ້ໃນວັນທີ່ 25 ເດືອນ ພຶດສພາ (May) ປີ 1959 ຣັຖບາລແຫ່ງພຣະຣາຊອານາຈັກລາວ ພາຍໃຕ້ການເປັນນາຍົກຣັຖມົນຕຣີ ຂອງ ພະນະທ່ານ ຜຸຍ ຊນະນິກອນ ໄດ້ທຳການຈັບກູມສະມາຊິກນັກການເມືອງຂອງ ລາວ ຄ.ມ.ນ. ຫລື ຄນະປະເທສລາວ ມີດັ່ງນີ້: 1.ເຈົ້າ ສຸພານຸວົງສ໌, 2. ພຣະຍາ ພູມີ ວົງວິຈິຕ, 3. ທ່ານ ໜູຮັກ ພູມສວັນ, 4. ທ່ານພູນ ສີປະ ເສີດ, 5. ທ່ານສີທົນ ກົມມະດຳ, 6. ທ່ານ ຊຽງມາໄຂຄຳພິທູນ,7.ທ່ານໝື່ນ ໂສມວິຈິຕ, 8. ທ່ານສີຊນະສີສານ, 9. ທ່ານສິງຄະໂປ ສີໂຄຕ ຈຸນນະມາລີ, 10. ທ່ານຄຳຜາຍ ບຸບຜາ, 11. ທ່ານເພົ້າ ພົມມະຈັນ, 12. ທ່ານບົວສີ ຈະເຣີນສຸກ, 13. ທ່ານຄຳເພັຊ ພົມມະວັນ,14. ທ່ານສົມບູນ ວົງໜໍບຸນທັນ, 15. ທ່ານພູເຂົາ, ແລະ 16. ທ່ານມານະ ໄປຂັງໄວ້ໃນຄ້າຍສາຣະວັຕທະຫາຣ ທີ່ໂພນເຄັງ ໃນນະ ຄອນ ວຽງຈັນທນ໌. ເຫຕຜົນຂອງການຈັບກຸມສະມາຊິກພັຄຄນະປະເທສລາວ ແມ່ນ:



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ຢູ່ໃນວິງການຣັຖບານແຫ່ງພຣະຣາຊອານາຈັກລາວ ມີພັຄການເມືອງຄອມມຸຍນິສຕ໌ຮ່ວມຢູ່ດ້ວຍ ເພາະສະນັ້ນ ຣັຖບານສະຫາຣັຖ ຈື່ງຕ້ອງຕັດການຊ່ວຍເຫລືອລາວ.
- ບໍ່ຍອມເອົາກຳລັງ ແລະ ສອງແຂວງເຂົ້າຮວ່ມກັບຝ່າຍວຽງຈັນທນ໌. ບໍ່ເທົ່ານັ້ນ ກອງພັນປະເທສລາວທີ່ທົ່ງໄຫຫີນໄດ້ໂຕນໜີໄປໝົດ. ຣັຖບານທ່ານ ຜຸຍ ຊນະນິກອນ ຈື່ງໄດ້ຕັດສິນໃຈຈັບກູມ "ຄນະປະເທສລາວ" ດັ່ງກ່າວ; ແຕ່ໄດ້ເຮັດໃຫ້ສະຖານທູຕນາໆຊາຕປະຈຳຢູ່ລາວ ຮູ້ສຶກເປັນຫວ່ງ, ແລະ ບໍ່ພໍໃຈຕໍ່ເຫຕການທີ່ໄດ້ເກີດຂື້ນ.

ໃນວັນທີ່ 29 ເດືອນຕຸລາ (October) 1959, ພຣະເຈົ້າມະຫາຊີວິດສີສວ່າງວົງສ໌ໄດ້ສວັນນະຄົຕ. ສະຖານະການພາຍໃນປະເທສໄດ້ປັ່ນປວ່ນຂື້ນຫລາຍຢ່າງ, ລາວຄອມມຸຍນິສຕ໌ໄດ້ໃຊ້ແຜນການຄາຕກັມ ນັກການເມືອງຂອງຝ່າຍຂວາ, ຂ້າຣາຊການ, ນັກທຸຣະກິຈ, ນັກເຜີຍແຜ່ສາສນາ. ຍ້ອນຄວາມປັ່ນປວ່ນນີ້ ຣັຖບານຂອງສະຫາຣັຖຮູ້ສຶກເປັນຫວ່ງ ຈື່ງໄດ້ສົ່ງຜູ້ສັງເກຕການແລະໜ່ວຍທະຫາຣຂອງສະຫະຣັຖ ມາຝຶກນາຍຕຳຣວຈ; ນາຍທະຫາຣ ພາຍໃນພຣະຣາຊອານາຈັກລາວ ຫລາຍຂື້ນ ຕົວຢ່າງແມ່ນຝຶກກອງພັນໂດດຈອ້ງ ທີ່ສອງຂອງ ຣ.ອ. ກອງແລ. ດັ່ງນີ້ ການເຄື່ອນໄຫວຕ່າງໆຂອງກອງແລ ຈື່ງບໍ່ໄດ້ຮັບຄວາມສົນໃຈໄປຊົ່ວຄາວ. ກອງແລກໍໃຊ້ໂອກາສນີ້ເຮັດຣັຖປະຫາຣຂື້ນ. ອີກຢ່າງໜື່ງ ໃນຄນະນັ້ນ ຣັຖບານແຫ່ງພຣະ ຣາຊອານາຈັກລາວ ກຳລັງຫຍູ້ງນຳກິຈທຸຣະພິທີປົງພຣະສົພຂອງເຈົ້າຊີວິດ, ຈື່ງລະເຫລີງຕໍ່ການກຳ ກັບພວກນັກໂທສການເມືອງ ເປັນໂອກາສອັນເໝາະສົມໃຫ້ພວກນັກໂທສແຫກອອກຈາກຄຸກ ໃນ ເວລາທ່ຽງ ຄືນ (12:00 ໂມງ) ໃນວັນທີ່ 23 ເດືອນພຶສພາ (May) ປີ 1960 ໄປໄດ້ຢ່າງງ່າຍດາຍ. ແມ່ນສາຣະ ວັຕທະຫາຣ ຜູ້ຢູ່ເວັນຍາມຊື່ ທອງເສີຍ ໂຄຕວົງສາ ເປັນຜູ້ພາໜີ.

ໃນຄນະທີ່ເຈົ້າ ສຸພານຸວົງສ໌ ແລະ ພັກພວກຍັງຢູ່ໃນຄຸກນັ້ນ, ຄອມມຸຍນິສວຽດນາມເໜືອໄດ້ສົ່ງຜູ້ມາວາງແຜນຕິດຕໍ່ ຈອບອອຍ ຣ.ອ. ກອງແລ ແລະເຈົ້າໜ້າທີ່ສາຣະວັດຮັກສາຍາມຄຸກ. ຕອນນັ້ນແມ່ນ ນາຍສາລີ ວົງຄຳຊາວ ສູນກາງພັຄຄອມມຸຍນິສຕ໌ອິນດູຈີນ ເປັນຜູ້ສົ່ງລົງມາສ້າງພື້ນຖານຢູ່ໃນເຂຕບໍຣິເວນ ທົ່ງຮາບວຽງຈັນທນ໌. ຣ.ອ. ກອງແລ ເປັນຜູ້ຕິດຕໍ່ເຈົ້າສຸພານຸວົງສ໌ ແລະນາຍສາລີ ວົງຄຳຊາວ, ເພື່ອວາງແຜນຊ່ວຍເຈົ້າສຸພານຸວົງສ໌ແລະຄນະ ໂຕນອອກຈາກຄຸກໄປຊຸກເຊື່ອງຢູ່ໃນ ບໍຣິເວນໄກ້ໆນະ ຄອນວຽງຈັນທນ໌, ເພື່ອລໍຈັງຫວະອັນເໝາະສົມ ໄດ້ກະໃສ່ໃນງານປົງພຣະສົພຂອງເຈົ້າຊີວິຕສີສວ່າງວົງສ໌ ທີ່ໄດ້ກຳນົດໃສ່ເດືອນສິງຫາ (August) 1960. ໃນວັນທີ່ 9 ເດືອນສິງຫາ (August) 1960, ຣ.ອ. ກອງແລ ໄດ້ເຮັດ ຣັຖປະຫາຣຂື້ນໃນນະຄອນວຽງຈັນທນ໌ ໄດ້ເຮັດໃຫ້ເຈົ້າສຸພານຸວົງສ໌ ພ້ອມດ້ວຍຄນະ ມີ ໂອກາສ ລອດກັບໄປຢູ່ຊຳເໜືອຢ່າງປອດພັຍ. ຫລັງຈາກກອງແລເຮັດຣັຖະປະຫາຣແລ້ວ ສຖານະການທາງທະຫາຣ ໄດ້ມີການສູ້ລົບກັນ ນັບມື້ນັບຮ້າຍແຮງຂື້ນ, ບໍ່ແມ່ນແຕ່ໃນປະເທສລາວເທົ່ານັ້ນ ໃນປະເທສ ວຽດນາມ ກໍເຊັ່ນດຽວກັນ. ສຖານະການໄດ້ເຮັດໃຫ້ປະຊາຊົນລາວ ໄດ້ຮັບຄວາມເດືອດຮອ້ນ ແລະສ້າງຄວາມຢ້ານ ກົວຂື້ນຕື່ມ ຢ່າງບໍ່ເຄີຍມີມາແຕ່ກ່ອນ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1954, ສັນຍາສະງົບເສິກໃນອິນດູຈີນໄດ້ບົ່ງໄວ້ໃຫ້ທະຫານຕ່າງດ້າວຖອນອອກຈາກລາວໄປ, ຝຣັ່ງເສສໄດ້ປະຕິບັດຕາມສັນຍາດັ່ງກ່າວ ແລະຖອນທະຫານອອກຈາກລາວທັງໝົດ; ແຕ່ຕົງກັບຂ້າມ ຈຳນວນທະຫານຂອງວຽດນາມເໜືອ ໄດ້ເພີ່ມຂຶ້ນຢູ່ໃນດິນແດນຂອງລາວ ຢ່າງຕໍ່ເນື່ອງ ໂດຍບໍ່ນັບຖືສັນຍາໃດໆ ທີ່ຈະເຮັດໃຫ້ການເມືອງເປັນກາງຂອງເຈົ້າສຸວັນນາພູມາ ບັນລຸຜົນສຳເຣັຈ ແຕ່ເປັນກາງແບບ ຈອມປອມ ເພາະວ່າຢູ່ຊັງໄຂ, ແຂວງຊຽງຂວາງ ເຕັມໄປດ້ວຍ ກອງທະຫານຂອງຄອມມູຍນິສຕ໌ ແລະ ສະຖານທູຕຂອງ ຄ.ມ.ນ. ແຕ່ສະຖານທູຕຂອງໂລກເສຣີຢູ່ເມືອງນີ້ ແມ້ແຕ່ສະຖານທູຕດຽວ ກໍ່ບໍ່ມີ. ເຫັນ ສະພາບເປັນເຊັ່ນນັ້ນ ສະຫາຣັຖຈຶ່ງໄດ້ຕັດສິນໃຈ ເຂົ້າໄປໃຫ້ການສນັບສນຸນຝ່າຍສະເດັຈເຈົ້າບູນອູ້ມນະຈຳປາສັກ ແລະ ນາຍພົນ ພູມີ ໜໍ່ສວັນ ແລ້ວລາມໄປໃສ່ວຽດນາມໃຕ້ ສະຫາຣັຖຕ້ອງໄດ້ປ້ອງກັນ ເອເຊັຍຕາວັນອອກສ່ຽງໃຕ້ ໃຫ້ ພົ້ນຈາກການຂຍາຍລັທທິຄອມ ມຸຍນິສຕ໌ ໄປສູ່ຂົງເຂດນີ້.

ຫລັງຈາກເຈົ້າສຸພານຸວົງສ໌ຖືກຄຸກ ການເລືອກຕັ້ງກໍໄດ້ມີຂຶ້ນ ສໄມນັ້ນແມ່ນພັຄຂອງເຈົ້າສົມສນິດໄດ້ສຽງສວ່ນຫລາຍ. ເຈົ້າສົມສະນິດໄດ້ຂຶ້ນເປັນນາຍົກຣັຖບາລ ແທນພະນະທ່ານຜຸຍຊນະນິກອນ ທ່ານນາຍພົນພູມີໜໍ່ສະວັນ ເປັນຮອງນາຍົກ ແລະເປັນຣັຖະມົນຕຣີກະຊວງປອ້ງກັນປະເທສ. ທ່ານນາຍພົນພູມີໜໍ່ສະວັນໄດ້ຈັດຕັ້ງກຣົມປະສານງານຂຶ້ນ ຍ້ອນເວລານັ້ນຢູ່ໃນນະຄອນວຽງຈັນທນ໌ ມີການຈັດຕັ້ງຫລາຍ ກຣົມກອງໂພດ ຈຶ່ງເອົາມາໂຮມກັນເປັນ “ກຣົມປະສານງານ ອັນດຽວ”. ທ່ານນາຍພົນສີໂຫລານພຸທະກູລ (ຕອນນັ້ນຍັງເປັນ ພ.ອ. ກອງທັພບົກ) ໄດ້ມາເປັນອະທິບໍດີກຣົມປະສານງານແຫ່ງຊາດ.

ໃນປີ 1960, ໄດ້ມີການເລືອກຕັ້ງສະມາຊິກສະພາຜູ້ແທນຣາຊດອນເພີ່ມ ເພາະຝ່າຍປະເທສລາວບໍ່ໄດ້ລັບການເລືອກຕັ້ງເປັນຜູ້ແທນຣາຊດອນ ຈຶ່ງມີການເລືອກຕັ້ງເພີ່ມ. ທ່ານມົວເຈ້ຍຊ້າງ ໄດ້ຮັບໜ້າທີ່ເປັນເຈົ້າເມືອງມົ້ງ ແທນທ່ານຢົ້ວປາວຢ່າງ. ທ່ານມົວເຈ້ຍຊ້າງ ໄດ້ເຂົ້າສະມັກລົງເລືອກຕັ້ງເປັນຜູ້ແທນຣາຊດອນເພີ່ມ ເພື່ອແຂງຂັນເອົາຄະແນນສຽງກັບພັຄປະເທສລາວ ສຳຫລັບແຂວງຊຽງຂວາງ. ໃນຂນະທີ່ເດີນທາງໄປຫາສຽງຢູ່ບໍຣິເວນໜອງແຮດ ທ່ານມົວເຈ້ຍຊ້າງ ໄດ້ຖືກລອບຍິງຢູ່ກາງທາງ ແລະໄດ້ເສັຍຊີວິດຄາຣົຖທີ່ທ່ານໃຊ້ເປັນພາຫານະເດີນທາງໄປຫາສຽງຢູ່ບ້ານພັກແຄະ, ໜອງແຮດ, ແຂວງຊຽງຂວາງ ໃນຕົ້ນເດືອນເມສາ(April) ປີ 1960.




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 2.

# ການສູ້ລົບໃນລະຫວ່າງປີ 1960

ເລີ່ມແຕ່ປີ 1958 ສະຫາຣັຖໄດ້ເຂົ້າໄປພົວພັນດ້ານການຊ່ວຍເຫລືອ ດ້ານທະຫາຣແລະດ້ານເສຖາກິດ ແກ່ລາວ ຫລັງຈາກສົງຄາມຝຣັ່ງເສສ. ໃນວັນທີ່ 9 ເດືອນສິງຫາ ປີ 1960, ກອງແລໄດ້ເຮັດຣັຖປະຫາຣ ເພື່ອຄົ້ນລົ້ມຣັຖບານທີ່ເຈົ້າສົມສນິທເປັນນາຍົກຣັຖະມົຕຣີ ແລະນາຍພົນພູມີໜໍ່ສະວັນ ເປັນຜູ້ຮອງ. ຄນະຣັຖປະຫາຣໄດ້ຮຽກຮ້ອງເອົາສະເດັຈເຈົ້າສູວັນນາພູມາ ທີ່ຫາກໍໄປຮັບໜ້າທີ່ເປັນເອກອັຄະຣາຊທຸຕລາວປະຈຳຢູ່ປະເທສຝຣັ່ງເສສ ກັບຄືນມາເປັນນາຍົກຣັຖມົນຕຣີຣັຖບາລຂອງຄນະຣັຖປະຫາຣ ແລະທ່ານກອງແລໄດ້ເອົາເຄື່ອງບິນຊອບເປີ ໄປຕອ້ນເອົາຄນະຜູ້ນຳຝ່າຍປະເທສລາວ 5 ທ່ານ ທີ່ແຫກຄຸກໄປ ລີ້ຢູ່ໃນບໍຣິເວນເມືອງກາສີ ກັບມາຮ່ວມຄນະຣັຖບາລຂອງສະເດັຈເຈົ້າສຸວັນນາພູມາ. ຄນະທີ່ໄດ້ໄປຕອ້ນ ຄືນມາ ມີຄື: 1. ທ່ານໜູຮັກ ພູມສວັນ, 2. ທ່ານພູນ ສີປະເສີດ, 3. ທ່ານສີສະນະ ສີສານ, 4. ທ່ານ ສິງ ກະໂປ ສີໂຄຕຈຸນນະມາລີ, ແລະ 5. ທ່ານພູມີ ວົງວິຈິຕ.

ຄົນລາວສ່ວນຫລາຍຫວັງແລະຄິດວ່າ ຣັຖບາລເປັນກາງຂອງເຈົ້າສຸວັນນາພູມາ ຈະຂໍການຊ່ວຍເຫລືອຈາກປະເທສຝຣັ່ງເສສ ແຕ່ຄວາມຄິດນີ້ຜິດຫວັງ ເພາະວ່າຄນະຣັຖປະຫາຣກັບໄປຮ່ວມມືກັບກຳລັງຂອງຄນະປະເທສລາວ ແລະໂລກຄອມມຸຍນິສຕ໌ ໂດຍການເສີມເອົາກຳລັງຈາກວຽດນາມເໜືອ ເຂົ້າມາເຕັມນະຄອນວຽງຈັນທນ໌. ບໍ່ພໍເທົ່າໃດມື້ ຫລັງຈາກ ຣ.ອ. ກອງແລ ກໍ່ຣັຖປະຫາຣຂຶ້ນ ຜູ້ຮອງກອງພັນທະຫາຣຮັກສາການເດີ່ນບິນທົ່ງໄຫຫີນ ຊື່ງຢູ່ໃຕ້ການບັງຄັບບັນຊາຂອງ ພ.ຕ. ວ່າງປາວ ໄດ້ລອບສັງຫາຣ ພ.ຕ. ວ່າງປາວ ໃນຕອນກາງຄືນແຕ່ ພ.ຕ. ວ່າງປາວ ສາມາດເອົາຕົວລອດໄດ້ຢ່າງປອດພັຍ. ການລອບ ສັງຫາຣນີ້ ອາຈເກີດມາຈາກຄນະປະຕິວັຕກອງແລ ທີ່ນະຄອນວຽງຈັນທນ໌ ເປັນຜູ້ສັ່ງກໍເປັນໄດ້. ຍ້ອນເຫຕການລອບສັງຫາຣນີ້ ພັນຕຣີ ວ່າງປາວ ຈື່ງຕັດສິນໃຈຕໍ່ສູ້ຝ່າຍເປັນກາງ ຂອງສະເດັຈເຈົ້າສຸວັນນາພູມາ.

ປະມານໜຶ່ງອາທິຕຍ໌ຕໍ່ມາ ພັນຕຣີວ່າງປາວ ກໍສາມາດທອ້ນໂຮມກຳລັງ ແລະໄດ້ກັບໄປຍຶດທົ່ງໄຫຫີນເອົາໄວ້. ບໍ່ເທົ່າໃດມື້ ສເດັຈເຈົ້າສຸວັນນາພູມາໄດ້ສົ່ງທ່ານນາຍພົນອຳຄາ ສຸຂວົງສ໌ ໄປເກັບເງນເຂົ້າ ຢູ່ແຂວງຊຽງຂວາງ ເພື່ອເອົາໄປລ້ຽງທະຫາຣ ຄ.ມ.ນ. ຢູ່ໃນນະຄອນວຽງຈັນທນ໌ ແຕ່ ພ.ຕ. ວ່າງປາວ ໄດ້ຄຸມຕົວໄວ້ ແລ້ວສົ່ງໄປໃຫ້ຄນະປາບຣັຖປະຫາຣ ຢູ່ສວັນນະເຂຕ. ອີກຕໍ່ມາບໍ່ເທົ່າໃດວັນ ສະເດັຈເຈົ້າສູວັນນາພູມາກໍໄດ້ສົ່ງພຣະຍາ ຕູ້ບີ ລີຟຸງ ຂື້ນໄປຊຽງຂວາງ ໃນຖານະເປັນຣັຖມົນຕຣີກະຊວງຍຸຕິທັມຂອງ ຣັຖບາລໃຫ້ຂື້ນໄປກ້ຽວກ່ອມປະຊາຊົນຢູ່ໃນແຂວງຊຽງຂວາງ ໃຫ້ພາກັນຢູ່ໃນຄວາມສະງົບ, ແຕ່ກໍຖືກ ພັນຕຣີ ວ່າງປາວ ກັກຕົວໄວ້ ບໍ່ໃຫ້ລົງໄປຮ່ວມມືກັບຄນະຣັຖບາລຂອງສະເດັດເຈົ້າສູວັນນາພູມາ.
ໃນວັນທີ່ 10 ເດືອນກັນຍາ (September) 1960, ນາຍພົນພູມີ ໜໍ່ສວັນໄດ້ປະກາສເປັນຄນະປາບ ຣັຖ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ປະຫານ ຕັ້ງຢູ່ສວັນນະເຂດ ຢູ່ພາຍໃຕ້ການນໍາພາຂອງສເດັຈເຈົ້າບູນອູ້ມ ນະຈໍາປາສັກດິ໌, ເພື່ອຈຸດ ປະສົງ ໄປປົດປ່ອຍເອົານະຄອນວຽງຈັນທນ໌ ອອກຈາກອໍານາຈຂອງຄນະຣັຖປະຫານ ຣ.ອ. ກອງແລ.

ໃນວັນທີ່ 8 ເດືອນທັນວາ (December) 1960, ນາຍພັນເອກ ກຸປະສິດອາໄພ໌ຍ ຜູ້ບັນຊາການ ທະຫານ ພາຄ 2 (ກ່ອນປີ 1962 ບໍ່ມີພາຄ 5 ມີແຕ່ 4 ພາຄເທົ່ານັ້ນ. ແຂວງຊຽງຂວາງ, ແຂວງຊໍາເໜືອ ແລະແຂວງ ວຽງຈັນ ໂຮມກັນເປັນພາຄ 2) ໄດ້ນໍາກອງທະຫານ ໄຕ້ການບັງຄັບບັນຊາຂອງທ່ານ ເຂົ້າ ໂຈມຕີຍຶດເອົາ ນະຄອນວຽງຈັນທນ໌, ແຕ່ບໍ່ສໍາເຣັດ ເພາະຄນະຣັຖະປະຫານມີກອງທະຫານວຽດນາມ ເໜືອສນັບສນຸນ ຢູເບື້ອງຫລັງ. ສະຖານະການໄດ້ເຮັດໃຫ້ສະເດັຈເຈົ້າສຸວັນນະພູມາ ນາຍົກຣັຖມົນຕຣີ ໄດ້ຂຶ້ນເຄື່ອງບິນ ໜີອອກໄປຫລົ້ພັຍຢູ່ພນົມເປັນ ປະເທສຂເມນ ຈົນກະທັ້ງວັນທີ່ 11 ເດືອນກຸມພາ (February) ປີ 1961 ຈື່ງໄດ້ຂື້ນໄປຂັງໄຂ, ແຂວງຊຽງຂວາງ, ເພື່ອໄປສົມທົບກັບ ຣ.ອ. ກອງແລ ແລະ ກອງທະຫານວຽດນາມ ເໜືອ ທີ່ຍຶດໄດ້ທົ່ງໄຫຫີນໄວ້ເປັນທີ່ຕັ້ງຢ່າງຮຽບຮ້ອຍໃນວັນທີ່ 31 ເດືອນທັນວາປີ 1960.

ໃນວັນທີ່ 13 ເດືອນທັນວາ (December) ປີ 1960, ກອງພັນທະຫານຣາບອາກາສທີ່ໜຶ່ງ ໄດ້ໂດດຈອັງ ລົງໃສ່ທ່ານາແລ້ງ ໄກ້ໆທ່າເດື່ອ ແລ້ວເດີນເຂົ້າເສີມກອງກໍາລັງທະຫານພາຄ 2 ຢູ່ທີ່ຈີນາຍໂມ້ ເຂົ້າ ສູ້ຣົບ ກັບຄນະຣັຖປະຫານ ຣ.ອ. ກອງແລ. ກອງພັນທະຫານບົກແລະຫລາຍກອງພັນຂອງ ຄນະປະຕິ ວັດສວັນ ນະເຂດ ໄດ້ເຄື່ອນຕາມຖນົນ ເລຂທີ່ 13 ຈາກປາກຊັນ ເຂົ້າວຽງຈັນທນ໌, ເພື່ອຮ່ວມກັບກອງ ທະຫານພາຄ 2 ແລະ ກອງພັນທະຫານຣາບອາກາສທີ່ໜຶ່ງ, ທີ່ກໍາລັງສູ້ຣົບກັບຄນະຣັຖປະຫານ ປະສົມ ວຽດມິນ ຢູ່ໃນ ນະຄອນວຽງ ຈັນທນ໌.

ໃນວັນທີ່ 16 ເດືອນທັນວາ (December) 1960, ແມ່ນການສູ້ຣົບມື້ສຸດທ້າຍ ລະຫວ່າງຄນະຣັຖປະ ຫານ ແລະ ຄນະປະຕິວັດສວັນນະເຂດ ເຮັດໃຫ້ ນະຄອນວຽງຈັນທນ໌ ຖືກປົດປ່ອຍອອກຈາກກອງທະຫານ ຂອງ ຄນະຣັຖປະຫານ. ກອງແລໄດ້ແຕກຖອຍອອກຈາກນະຄອນວຽງຈັນທນ໌ ໄປຕາມຖນົນເລຂທີ່ 13 ໄປຫາ ສະລາພູຄູນ (ພນະທ່ານພູມີວົງວິຈິຕ ບັນທຶກຢູ່ໃນປຶ້ມ ຄວາມຊົງຈໍາຂອງເພີ່ນວ່າ: "*ບໍ່ຢາກສູ້ຣົບ ຢູ່ໃນນະ ຄອນວຽງຈັນທນ໌ ເພາະຈະນໍາຄວາມເສັຍຫາຍໜັກມາສູ່ປະຊາຊົນ ແລະ ນະຄອນວຽງຈັນທນ໌ ຈື່ງ ຕັດ ສິນໃຈ ຖອຍໄປຍຶດທົ່ງໄຫຫີນເພື່ອຕໍ່ສູ້ຕໍ່ໄປ*"). ກອງທະຫານຂອງຄນະປະເທສລາວ ໄດ້ຕຽມກອງທະ ຫານ ລໍຖ້າກອງແລ ຢູ່ວັງວຽງ. ເມື່ອກອງແລໄປເຖີງເຄື່ອງບິນຂອງວຽດນາມເໜືອ ກໍໄດ້ລໍາລຽງອາວຸທຍຸ ໂທປະກອນສົງຄາມ ແລະ ສະບຽງອາຫານ ໄປຖີ້ມລົງໃຫ້ກອງແລ ປະກອບອາວຸທໃໝ່ ຄື ປືນໃຫ່ຍ, ຣົຖ ຖັງຂນາດເບົາ ແລະ ອາວຸທຄົບມື. ກອງແລໄດ້ເຄື່ອນຕໍ່ໄປໃສ່ເມືອງກາສີ, ສະລາພູຄຸນ, ແລ້ວຕໍ່ໄປ ຍຶດເດີນຍົນຕ໌ ເມືອງສຸຍ ແຂວງຊຽງຂວາງ ໃນວັນທີ່ 25 ເດືອນທັນວາ (December) 1960.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*<u>ຮູບທີ່ 38</u>. ພັນຕຣີວ່າງ ປາວແລະ ນາຍທະຫານຫລາຍຄົນໄດ້ລວບຣວມຊາວເຜົ່າມົ້ງກັບໄປຍຶດເດີນຍົນທົ່ງໄຫຫີນໃນປີ 1960. ໃນຮູບນີ້ ຜູ້ເອົາມືຄ້ຳແອວ ແມ່ນ ພ.ຕ. ວ່າງປາວ ຜູ້ເອົາມືຈຸ້ກັນຢູ່ແອວແມ່ນ ພ.ອ. ຕູ້ລືມົວ ເບື້ອງຂວາທ່ານ ພ.ຕ. ວ່າງປາວ ແມ່ນ ພ.ອ. ຊື້ງເລັ່ງຊື່ງ ແລະ ພ.ອ. ເຈີປາວມົວ ຜ.ບ. ບວມຫລີງ.*

ສະຖານະການໄດ້ປ່ຽນແປງຢ່າງຄັບຂັນ ຍ້ອນການປະຕິວັດຂອງ ຣ.ອ. ກອງແລ ນາຍ ພ.ຕ. ວ່າງປາວ ຈຶ່ງຂາດການຕິດຕໍ່ນຳຂັ້ນສູງ ແລະຂາດຄຳສັ່ງດ້ານນະໂຍບາຍຈາກຣັຖະບາລ ຍ້ອນຄວາມສັບສົນ ຈຶ່ງບໍ່ໄດ້ວາງແຜນປ້ອງກັນທົ່ງໄຫຫີນໄວ້ຢ່າງດີລ່ວງໜ້າ. ເພາະສະນັ້ນ ຈຶ່ງເປັນໂອກາສໃຫ້ຝ່າຍກອງແລ ສາມາດເຂົ້າຍຶດເອົາເມືອງສຸຍ LS108 ໄດ້ຢ່າງງ່າຍດາຍ. ກຳລັງ ຣ.ອ. ກອງແລ ກັບກຳລັງທະຫາຣວຽດນາມເໜືອໄດ້ບຸກໂຈມຕີບ້ານບານ ເພື່ອເປີດເສັ້ນທາງເລຂທີ່ 7 ຈາກວຽດນາມເໜືອ ສູ່ທົ່ງໄຫຫີນດັ່ງນີ້:

- ສາຍທີ່ໜຶ່ງ ເຄື່ອນຈາກຊຳເໜືອຫາບ້ານບານ ແມ່ນທະຫາຣວຽດນາມເໜືອ ປະສົມລາວ.ຄ.ມ.ນ;
- ສາຍທີ່ສອງ ເຄື່ອນຈາກໜອງແຮດຫາບ້ານບານ ແມ່ນທະຫານວຽດນາມເໜືອ ປະສົມມົ້ງ ຄ.ມ.ນ;
- ສາຍທີ່ສາມ ເຄື່ອນຈາກເມືອງສຸຍຫາບ້ານບານ ແມ່ນ ກຳລັງຂອງກອງແລ ປະສົມລາວ.ຄ.ມ.ນ.

ເມື່ອຍຶດບ້ານບານໄດ້ຮຽບຮ້ອຍແລ້ວ ກອງແລແລະວຽດນາມເໜືອກໍໄດ້ເຄື່ອນເຂົ້າໄປຍຶດທົ່ງໄຫຫີນ ເປັນຂັ້ນຕອນຕໍ່ໄປ. ພາຍຫລັງກອງແລແລະວຽດນາມເໜືອເຂົ້າຍຶດເມືອງສຸຍໄວ້ໄດ້ຮຽບຮ້ອຍແລ້ວ, ວຽດນາມ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເໜືອແລະກອງແລ ໄດ້ສົ່ງກອງກຳລັງ ພ້ອມດ້ວຍຣົຖຖັງ ເຄື່ອນເຂົ້າໄປຍຶດຂົວເຫລັກ ທີ່ເປັນຈຸດສຳຄັນໄວ້, ເພາະເປັນຂົວຂ້າມນ້ຳງື່ມ ແລະເປັນທາງຜ່ານເຂົ້າໄປຫາເດີນຍົນຕ໌ທົ່ງໄຫຫີນ, ວຽດນາມເໜືອໄດ້ໃຊ້ຍົນຕ໌ຣັຖເຊັຍ ແບບອີຢູຊິນ ເຂົ້າໄປລົງທີ່ເດີນຍົນຕ໌ເມືອງສຸຍ ມື້ລະຫລາຍຮ້ອຍລຳ ບິນແຕ່ເຊົ້າຮອດຄ່ຳ ຖ້ຽວລະສອງລຳ ບິນຮຽງກັນມາຖິ້ມເຄື່ອງຫລືມາລົງເດີນຍົນຕ໌ເມືອງສຸຍ ເພື່ອສົ່ງກຳລັງທະຫານອາວຸທຍຸທກະປົດໃຫ້ກອງແລ ທັງໝົດປະມານ 4 ມື້ເທົ່ານັ້ນ. ຣ.ອ. ກອງແລກໍເປີດສາກບຸກທົ່ງໄຫຫີນ ໂດຍມີການຊ່ວຍເຫລືອ ຈາກໂລກຄອມມຸຍນິສຕ໌ ຢ່າງມະຫາສານ, ເຂົ້າມາທຳຮ້າຍລ້າງຜານເຊື້ອຊາຕລາວ.

ໃນວັນທີ່ 29 ເດືອນທັນວາ (December) 1960 ທ່ານນາຍພົນພູມີ ໜໍ່ສວັນ ໄດ້ສົ່ງໜຶ່ງກອງພັນ ທະຫານຣາບອາກາສ ໄປເສີມກຳລັງທະຫານຂອງພັນຕຣີວ່າງປາວ ທີ່ມີໜຶ່ງກອງພັນຢູ່ທົ່ງໄຫຫີນ, ເພື່ອໄປປ້ອງກັນເດີນຍົນທົ່ງໄຫຫີນ ແລະຕໍ່ສູ້ກັບສັດຕຣູວຽດນາມເໜືອແລະກອງແລ. ພໍຝ່າຍມິຕໄດ້ ເຄື່ອນກຳ ລັງໄປເຖິງຂົວເຫລັກ (ນ້ຳງື່ມ) ກຳລັງຍ່າງເຂົ້າຂົວກໍຕົກຢູ່ໃນວົງລອ້ມຂອງສັດຕຣູ ທີ່ໄດ້ຖລົ່ມດ້ວຍປືນ 12.8 ມ/ມ ແລະ 14.6 ມ/ມ ຈາກຣົຖຖັງ ເຂົ້າໃສ່ກຳລັງທະຫານຂອງພັນຕຣີວ່າງປາວ ແລະຂອງ ນາຍພົນພູມີໜໍ່ສວັນທີ່ກຳລັງຍ່າງໄຕ່ຂົວຢູ່ນັ້ນ ຫລາຍຄົນໄດ້ຖືກປືນຕາຍຫລືຈຳເປັນຕ້ອງໂດນຂົວ ແລ້ວ ຕາຍ. ນາຍທະຫານໜາວເຣີ ວ່າງ ເວົ້າວ່າ ເປັນຕາຢ້ານ, ຂວັນໜີ ບິຟໍ່ ຍ້ອນປືນໃຫ່ຍທີ່ດັງມາ ຢ່າງ ສະນັ່ນຫວັ່ນໄຫວ.

ໃນຂນະດຽວກັນ, ກອງທະຫານປືນໃຫ່ຍ 105 ມ/ມ ຂອງນາຍພົນພູມີ ໜໍສະວັນ ທີ່ໄດ້ສົ່ງມານຳກອງທະຫານຣາບອາກາສ ຕັ້ງປືນຍິງກໍບໍ່ທັນ ຕ້ອງໄດ້ຖິ້ມປືນແລ້ວໜີກໍເກືອບບໍ່ທັນ. ໃນວັນທີ່ 31 ເດືອນທັນວາ (December) 1960, ສນາມບິນທົ່ງໄຫຫີນແລະເມືອງຊຽງຂວາງ ໄດ້ຕົກຢູ່ພາຍໃຕ້ການຄວບຄູມຂອງຝ່າຍສັດຕຣູຢ່າງສິ້ນເຊີງ. ທະຫານຂອງທ່ານພັນຕຣີ ວ່າງປາວ, ແລະຂອງນາຍພົນພູມີໜໍ່ສ້ວນໄດ້ຖອຍຂື້ນຣົຖໄປທາງຊຽງຂວາງ, ໄດ້ປະຖິ້ມຣົຖໄວ້ຢູ່ບໍຣິເວນໄກ້ໆບ້ານຊຳຄອນ ທາງທິດໃຕ້ເມືອງຊຽງຂວາງ ແລ້ວຍ່າງ ໄປທາງທ່າວຽງ ຈົນເຖິງທ່າໂທມ ແລ້ວພັນຕຣີວ່າງປາວ ໄດ້ຕິດຕໍ່ຂໍຍົນຕ໌ເຮລີໂຄບເຕີເພື່ອເຂົ້າໄປພົບທ່ານນາຍພົນພູມີ ໜໍ່ສ້ວນ. ໃນໂອກາສດຽວກັນ ຈື່ງໄດ້ພົບຜູ້ຕາງໜ້າສະຫາຣັຖ ທ່ານເຈມດັບບີວຢູແລຣ໌ (James W. Lair) ຜູ້ໃຫ້ການຊ່ວຍເຫລືອທາງທະຫານຈົນເຖິງ ປີ 1967 ຕໍ່ມາແມ່ນທ່ານແພດແລນດຣີ (Pat Landry) ຈົນເຖິງປີ 1969 ຈື່ງແມ່ນ ທ່ານເຢຣີດາແນວ (Jerry Daniel) ຈົນຮອດປີ 1975 ແມ່ນຊ່ວຍເຫລືອດ້ານທະຫານ ແຕ່ໃນປີ 1975-1982 ເວລາຢູ່ໃນຣາຊອານາຈັກໄທ໌ຍ ແມ່ນຊ່ວຍອົພະຍົບທີ່ໜີໄປປະເທສໄທຍ໌.

ໃນວັນທີ່ 5 ເດືອນ ມັງກອນ (January) 1961 ພັນຕຣີ ວ່າງປາວໄດ້ເດີນຂື້ນໄປພູເບັ້ຍ, ແລ້ວລົງ ໄປຕັ້ງທີ່ໝັ້ນຢູ່ບ້ານປ່າດົງ, ຕັ້ງຊື່ວ່າ ລິມາໄຊ LS05. ໄດ້ຮຽກຮ້ອງປະຊາຊົນຢູ່ໃນແຂວງຊຽງຂວາງ, ແຂວງຫົວພັນ ໄປເຕົ້າໂຮມກັນເພື່ອປະກອບກຳລັງແລະຮັບອາວຸທທີ່ທາງສະຫາຣັຖສົ່ງມາໃຫ້. ເມື່ອມີກຳ ລັງປະກອບດ້ວຍອາວຸທຮຽບຮ້ອຍແລ້ວ ຈື່ງຈັດເປັນໜ່ວຍເຄື່ອນທີ່ ອອກໄປກວດລ້າງສັດຕຣູ ຢູ່ຕາມຈຸດ ຕ່າງໆ



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຈີນໄປເຖິງແຂວງຫົວພັນ.

ສະຫາຣັຖໄດ້ສົ່ງໜ່ວຍທາຂ່າວ ແລະຕຽມປ້ອງກັນຊາຍແດນລາວທາງພາກເໜືອ ແຂວງຟອງສາ ລີ ແລະ ແຂວງຫົວພັນ ຈຶ່ງເຮັດໃຫ້ຈີນແດງຕ້ອງບຸກຄ້າຍນ້ຳບັກຢ່າງໜັກໃນປີ 1962. ສະຫາຣັຖ ຈຶ່ງຕັດສິນໃຈໄປຕັ້ງກອງທັບອາກາສ ແລ້ວສົ່ງກຳລັງໄປຕັ້ງຢູ່ໃນປະເທສໄທຍ໌. ສະຖານະການ ຈຶ່ງ ໄດ້ຮ້າຍແຮງຂຶ້ນ ແລະ ວຽດນາມເໜືອຍິ່ງສົ່ງກຳລັງເຂົ້າວຽດນາມໃຕ້ ໃນປີ 1963. ຫລັງຈາກສະ ຫະຣັຖໄດ້ຕັດສິນໃຈ ໜູນຫລັງຝ່າຍວຽດນາມໃຕ້ ໃຫ້ແກ່ທ່ານໂງດິນດຽມ ສົງຄາມວຽດ ນາມ ຈຶ່ງລຸກເປັນໄຟຂຶ້ນຕັ້ງແຕ່ນັ້ນມາ.

ທ່ານພັນຕຣີວ່າງປາວ ເປັນນາຍທະຫາຣເຜົ່າມົ້ງຜູ້ທຳອິດທີ່ໄດ້ຍົດຊັ້ນຢູ່ໃນກອງທັບ ແຫ່ງພຣະຣາຊອານາຈັກລາວ ຂຶ້ນເປັນພັນໂທ. ໃນປີ 1962 ເປັນພັນເອກ ແລະເປັນຜູ້ບັນຊາການທະຫາຣພາຄ 2 ມີແຂວງຫົວພັນແລະຊຽງຂວາງ. *(ອ່ານໜ້າຊີວະປະວັຕຂອງນາຍພົນວ່າງປາວ).* ໃນລະຫວ່າງ ປີ 1961-1965 ມີທະຫາຣຝ່າຍລາວແດງ ຫລາຍຄົນໄດ້ໂຕນເຂົ້າມາຮ່ວມ ການຕໍ່ສູ້ນຳພົລຕຣີວ່າງປາວ ເພາະເຫັນວ່າລາວແດງ ພະເດັດການ ແລະເປັນລູກນ້ອງແກວ ເພາະທະຫາຣແກວຢູ່ໃນລາວບໍ່ຕ່ຳກວ່າ 40 ກອງພັນ. ທະຫາຣລາວໃນຣາຊອານາຈັກລາວມີບໍ່ເຖິງ 50 ກອງພັນໃນເວລານັ້ນ (ແຕ່ລະພາຄ ມີທະຫາຣບໍ່ເກີນສິບພັນຄົນ ແລະ ກໍມີແຕ່ 4 ພາຄ. ອີກຢ່າງໜຶ່ງ ຍ້ອນຂາດງົບປມານຈ່າຍທະຫາຣ). ສໄມນັ້ນ, ຜູ້ຕາງ ໜ້າຂອງສະຫະຣັຖຄົນແຣກ ໄດ້ໄປໃຫ້ການຊ່ວຍເຫລືອກອງກຳລັງທະຫາຣພາກ 2 ແມ່ນທ່ານ ບີວແລຣ໌ ແລະທ່ານເອກອັຄະຣາຊທູຕສະຫາຣັຖ ທ່ານວິລຽມ ສຸລີວັນ.

ໃນປີ 1961 ພນະທ່ານຕູ້ບີ ລີຟຸງ ໄດ້ໄປພຳນັກຢູ່ແຂວງສວັນນະເຂດ ຫລັງຈາກຖືກ ພ.ຕ. ວ່າງປາວ ກັກຕົວໄວ້ ຊຽງຂວາງ. ໃນໂອກາສດຽວກັນນັ້ນ ຈຶ່ງໄດ້ມີໂອກາສກັບໄປນະຄອນວຽງຈັນທນ໌ ເພື່ອຮ່ວມຣັຖບານຂອງສະເດັຈເຈົ້າບູນອູ້ມ (ໄດ້ຖືກແຕ່ງຕັ້ງເປັນຣັຖະມົນຕຣີວ່າການກະຊວງປະຊາສົງເຄາະ ແລະສາທາຣະນະສຸຂ).

ໃນປີ 1961, ປະຊາຊົນຊາວເຜົ່າມົ້ງແລະເຜົ່າລາວລູ່ມ ປະມານ 10 ພັນຄົນ ຢູ່ໃນແຂວງຊຽງຂວາງ ແລະແຂວງຫົວພັນ ໄດ້ລຸກຂຶ້ນເຂົ້າປະກອບອາວຸທສົງຄາມ ໂດຍການຊ່ວຍເຫລືອຈາກສະຫາຣັຖ ແລະ ການຝຶກຊ້ອມວິຊາທະຫາຣ ຢູ່ຕາມຄ້າຍທະຫາຣ ຄື: ປ່າດົງ, ບ້ານສັນທໍ້, ແລະຊຳທອງ. ຄຣູຝຶກ ວິຊາທະຫາຣເປັນຄົນໄທ໌ຍສ່ວນຫລາຍ ແລະມີບາງຄົນ ເປັນຊາວອາເມຣິກັນ. ສະຖານທີ່ຝຶກຊ້ອມ ໄດ້ຂຍາຍອອກເປັນຫລາຍຈຸດດັ່ງຕໍ່ໄປນີ້: ຢູ່ຕາມທິສໃຕ້ແລະທິສຕາວັນຕົກ ຂອງບ້ານປ່າດົງ (LS05) ບ້ານນາ (LS15), ບ້ານຜາປອງ, ບ້ານຊຽງແດດ ຂອງພີ່ນ້ອງລາວເທີງ (LS26), ບ້ານຖ້ຳຊ້ອນ (LS47), ບ້ານພູຟ້າ, ບ້ານພູວຽງ ແລະ ບ້ານພູໜອງຜີ (ບ້ານຂອງ ພ.ທ. ຕູ້ວ່າງຢາງ). ຢູ່ທາງທິສ ຕາວັນຕົກ ຫາທິສເໜືອ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

(LS05) ມີຄ້າຍບວມຫລົງ (LS32) ພ.ອ. ເຈີປາວ ມົວ ມີກຳລັງທະຫານປະມານ 12 ພັນຄົນ ຄ້າຍນີ້ ບໍ່ເຄີຍຕົກໃຫ້ສັດຕຣູ ແມ້ແຕ່ຄັ້ງດຽວເລີ່ມແຕ່ 1961-1975. ແຕ່ໃນທີ່ສຸດ ຄ້າຍນີ້ກໍໄດ້ສູນເສັຍ ໃຫ້ຄອມມູຍນິສຕ໌ ເພາະສະຫາຣັຖຖອນອອກຈາກອິນດູຈີນ. ປະຊາຊົນຄ້າຍນີ້ ໄດ້ຮັບການສູນເສັຍ ໜັກທີ່ສຸດ.

## ໜີລອດອອກຈາກບວມຫລົງ (LS32)

ໃນປີ 1976, ມີນາຍທະຫານຄົນໜຶ່ງໄດ້ຖິ້ມລູກເມັຍໄວ້ເບື້ອງຫລັງ ແລ້ວໂຕນໜີຂ້າມປ່າດົງພູເຂົາໄປສູ່ປະເທສໄທ໌ຍ, ເມື່ອຜູ້ກ່ຽວໄດ້ພົບໝູ່ເພື່ອນແລະຜູ້ນຳ ຈຶ່ງເລົ່າວ່າ: ເມື່ອໄດ້ຮູ້ວ່າເຈົ້ານາຍຜູ້ນຳພາ ໄດ້ໜີອອກຈາກປະເທສໝົດ ພວກເຮົາໝົດທຸກຄົນ ກໍເປັນລົມຈົນໜ້າມືດ ສລົບໄປກໍມີ, ຂາດສະຕິ ແລະ ບໍ່ຮູ້ຊ່ອງທາງ ຈະເຮັດແນວໃດຈຶ່ງດີ. ບາງຄົນກໍນັ່ງຄູ້ເຂົາລົງ ນົບຜີຟ້າ ຜີແຖນ, ກາບລົງດິນເໝືອນຄົນບ້າເພາະມືດມົວໄປທຸກດ້ານ. ເມື່ອ ພ.ອ. ເຈີປາວມົວ ຜູ້ບັນຊາການ ບວມຫລົງໄດ້ຍິນດັ່ງນັ້ນ, ທ່ານຈຶ່ງໄດ້ຕັດສິນໃຈກັບໄປປະເທສລາວ ໄປນຳພາລູກນ້ອງອອກ ຫລືຕໍ່ສູ້ຕາມສັດຈະຄວາມສະບານຮ່ວມ ກັນວ່າ: ຕ້ອງຢູ່ດ້ວຍກັນ, ໄປກໍຕ້ອງໄປດ້ວຍກັນແລະຕາຍ ກໍຕ້ອງຕາຍພ້ອມກັນ, ເພາະວ່າໄດ້ຕໍ່ສູ້ຮ່ວມກັນ ຍ້ອນບໍ່ມັກລັທທິ ຕົວະຍົວະ ຫລອກລວງຂອງຄອມມູຍນິສຕ໌. ພ.ອ. ເຈີປາວມົວ ໄດ້ກັບຄືນໄປສູ້ສັດຕຣູ ຈົນເຖິງປີ 1994 ແລະໄດ້ເສັຽຊີວິດຢູ່ໃນປ່າເມືອງລາວ.

ຢູ່ໃນພາຄ 2 ທິສເໜືອຂອງ (LS05) ມີຄ້າຍດັ່ງຕໍ່ໄປນີ້:

- ຄ້າຍແກ່ວບອນ (ບ້ານເກີດແລະຄ້າຍພາຍໃຕ້ການບັນຊາ ທ່ານ ພ.ທ. ວ່າງຝຸງ) ຕົກໃຫ້ສັດຕຣູ 4/30/1970;
- ຄ້າຍພູສະບົດ (ບ້ານເກີດ ທ່ານ ພ.ອ. ເຍັ່ຍຫລືວ່າງ ແລະ ພ.ທ. ວ່າງກົວ) ພາຍໃຕ້ການບັນຊາຂອງ ທ່ານ ພ.ອ. ເຍັ່ຍຫລື ວ່າງ. ໃນປີ 1969, ຖືກສັດຕຣູບຸກໂຈມຕີຢ່າງໜັກ, ເປັນຈຸດ ທີ່ໃກ້ຊາຍແດນລາວແລະວຽດນາມເໜືອ ຕິດກັບແຂວງຫົວພັນ ຊຳເໜືອ ຊຶ່ງແມ່ນສູນກາງ ຂອງແນວລາວຄອມມູຍນິສຕ໌.
- ຄ້າຍສັນຈໍ້ (LS02) ເປັນຄ້າຍຕັ້ງຢູ່ລະຫວ່າງກາງຊຽງຂວາງແລະໜອງແຮດ ໄດ້ສ້າງຄວາມກັນດານໃຫ້ສັດຕຣູຕາມເສັ້ນທາງເລຂທີ່ 7 ຈາກທົ່ງໄຫຫີນໄປຫາວຽດນາມເໜືອ. ຄ້າຍນີ້ ປະຕິບັດການຕ້ານສັດຕຣູໄດ້ດີ, ຈຶ່ງເຮັດໃຫ້ສັດຕຣູຕ້ອງທຸ່ມເທກຳລັງໂຈມຕີໃຫ້ແຕກກ່ອນ ປີ 1969. ຝ່າຍມິຕຕ້ອງສູນເສັຍນາຍທະຫານຄົນສຳຄັນຜູ້ໜຶ່ງຊື່ ພ.ທ. ລີຊາວ ເປັນນ້ອງຊາຍຂອງ ພ.ອ. ລີຕູ໊ປາວ. ໃນຕົ້ນປີ 1970, ຄ້າຍທະຫານພາຄເໜືອທັງໝົດ ໄດ້ຕົກໃຫ້ສັດຕຣູຄອມມູຍນິສຕ໌ວຽດນາມເໜືອ. ພາຄ 2 ໄດ້ສູນເສັຍພື້ນທີ່ປະມານ 70 ເປີເຊັນໃຫ້ສັດຕຣູ ສຳຫລັບແຂວງຫົວພັນໄດ້ເສັຍພື້ນທີ່ 100 ເປີເຊັນ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຢູ່ໃນພາຄ 2 ທິດຕາວັນອອກ LS05 ມີຄ້າຍດັ່ງຕໍ່ໄປນີ້:

- ຄ້າຍເມືອງໝອກ (LS46) ເປັນຄ້າຍສຳຄັນຂອງຝ່າຍມິດເພື່ອປ້ອງ ກັນພາຄສອງ ແລະ ພາຄ 5 ເປັນຈຸດທີ່ມີທະຫານ ແລະປະຊາຊົນຫລາຍສິບພັນຄົນ, ໄດ້ຖືກ ໂຈມຕີຢ່າງໜັກຈາກສັດຕຣູ ໄດ້ເສັຍຫລາຍເທື່ອ ແຕ່ກໍກັບໄປຍຶດໄດ້ຄືນທຸກຄັ້ງ. ຝ່າຍມິດໄດ້ຕັ້ງ ໝັ້ນຢູ່ຄ້າຍນີ້ຈົນເຖິງປີ 1975 ຈຶ່ງໄດ້ຖອຍເຂົ້າປ່າ ເພາະສະຫາຣັຖ ຕັດການຊ່ວຍເຫລືອ. ຜູ້ບັງ ຄັບບັນຊາຄ້າຍແມ່ນທ່ານ ພ.ອ. ຈົງກົວ ວື້. ທ່ານບໍ່ມີໂອກາສໄດ້ອົພຍົບໜີ ໄດ້ເສັຍຊີວິດ ຢູ່ໃນປ່າ ໃນປະເທສລາວ ປີ 1981. ຄ້າຍເມືອງໝອກມີຄ້າຍ ສຳລອງອ້ອມຄື: ຄ້າຍອັງເປີ, ຄ້າຍນ້ຳຮຽງ ເມັດ, ແລະຄ້າຍພູຫລວງ ນ້ອຍ.
- ຄ້າຍພູກະເບາະ ເປັນຄ້າຍຕັ້ງຢູ່ພູສູງກ່ວາໝູ່ ຢູ່ໃກ້ໆທິສໃຕ້ຕົວເມືອງຊຽງຂວາງ ເປັນຈຸດທີ່ສ້າງ ຄວາມກັນດານໃຫ້ສັດຕຣູ ທີ່ຢູ່ອ້ອມບໍຣິເວນຕົວເມືອງຊຽງຂວາງ ສັດຕຣູຈຶ່ງໄດ້ໂຈມຕີດ້ວຍປືນ ໃຫຍ່ ແລະຈຣວດ ຢ່າງຮ້າຍແຮງ ຈຶ່ງໄດ້ເສັຍໃຫ້ສັດຕຣູໃນປີ 1968.

ການປ່ຽນແປງຫລາຍຢ່າງໃນພາກພື້ນເອເຊັຍຄື: ສົງຄາມໃນປະເທສຈີນ; ສົງຄາມໃນເກົາຫລີ ແລະ ສົງ ຄາມໃນອິນດູຈີນ, ການສູນເສັຍຖານທັບດຽນບຽນຝູ ແລະກາຣຣັຖປະຫາຣຂອງ ຣ.ອ. ກອງແລ ເປັນທີ່ ຫວ່ງໄຍຂອງສະຫາຣັຖ. ທ່ານປະທານາທິບໍດີແຄນເນດີ Kennedy ເຂົ້າຮັບໜ້າທີ່ ໃນວັນທີ່ 21 ເດືອນ ມັງກອນ (January) 1961, ທ່ານຈຶ່ງໄດ້ຕັດສິນໃຈໃຫ້ການຊ່ວຍເຫລືອແກ່ຣັຖບາລລາວຕັ້ງແຕ່ ໃນປີ 1961 ແລະວຽດນາມໃຕ້ ຕັ້ງແຕ່ປີ 1963 ເພື່ອປ້ອງກັນການຂຍາຍຕົວຂອງຄອມມຸຍນິສຕ໌ ເພາະ ໂຮຈິ ມິນລະເມີດການນັດເຈຣະຈາ ເພື່ອແກ້ໄຂບັນຫາຖານທັບດຽນບຽນຝູ ແລະສັນຍາທີ່ເຈນີວາ ໃນປີ 1954.

ໃນປີ 1961-1964, ສະຫາຣັຖໄດ້ສິນໃຈໃນການຄົ້ນຄົ້ວຊອກຫາຂ່າວ ການເຄື່ອນໃຫວຂອງສັດຕຣູ ໃນ ບໍຣິເວນພາຄເໜືອຂອງລາວ ດັ່ງແຂວງຜົ້ງສາລີ, ແຂວງຫົວພັນ ເປັນຈຸດສຳຄັນໝາຍເລຂໜຶ່ງ ແລະ ແຂວງຊຽງຂວາງ ເປັນຈຸດສຳຄັນລຳດັບສອງ. ສະຫາຣັຖໄດ້ໃຫ້ການຊ່ວຍເຫລືອແກ່ຣັຖບາລລາວ ສົ່ງ ກຳລັງໄປຕັ້ງຄ້າຍໃສ່ນ້ຳບັກ ຢູ່ພາກເໜືອຂອງແຂວງຫລວງພະບາງ ໃກ້ແຂວງຜົ້ງສາລີ ແລະຫລາຍບ່ອນ ໃນແຂວງຫົວພັນ.

ໃນວັນທີ່ 27 ເດືອນກັນຍາ (September) 1962, ຫລັງຈາກການຈັດຕັ້ງຣັຖບາລເປັນກາງຂອງລາວ ສາມຝ່າຍ ທ່ານເອກອະຄະຣາຊທູຕສະຫາຣັຖ ທ່ານແລໂອນາດ ອົງເກີ ໄດ້ໄປຢ້ຽມຢາມກຳລັງຂອງ ກອງແລທີ່ທົ່ງໄຫຫີນ. ໃນວັນທີ່ 22 ເດືອນພຶສຈິກາ (November) 1962, ສະຫາຣັຖໄດ້ເອົາເຄື່ອງບິນ ສົ່ງອາຫານແລະເຄື່ອງໃຊ້ຕ່າງໆໃຫ້ຝ່າຍເປັນກາງ ແຕ່ເກີດມີບັນຫາຂຶ້ນ ເຮັດໃຫ້ນາຍ ພ.ອ. ທ້າວເດືອນ ສຸນນະຣາຊ ຜູ້ເຂົ້າຂ້າງຄອມມຸຍນິສຕ໌ຢ່າງຈິງຈັງ ບໍ່ມັກແລະບໍ່ເຫັນດີນຳ. ນາຍເດືອນ ຈຶ່ງໄດ້ເອົາກຳລັງ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ທະຫາຣຝ່າຍກາງ ທີ່ຢູ່ໃນການບັງຄັບບັນຊາຂອງຕົນແລະແກວ ໄປໂຈມຕີກຳລັງຂອງກອງແລ ທີ່ມີຈຳນວນນ້ອຍກ່ວາ ຕ້ອງໄດ້ແຕກໄປຢູ່ເມືອງພົ້ນ ວັນທີ່ 4 ເດືອນມິຖຸນາ (June) 1963 ແລ້ວແຕກໄປໃສ່ເມືອງສຸຍ. ນາຍພົນ ວ່າງປາວ ຈຶ່ງໄດ້ສົ່ງກຳລັງໄປໜູນຫລັງກອງແລ ແຕ່ກໍຢູ່ບໍ່ໄດ້. ໃນ ວັນທີ່ 4 ເດືອນຕຸລາ (October) ປີ 1963, ສະຫາຣັຖໄດ້ເພີ່ມການຊ່ວຍເຫລືອທາງອາກາສແກ່ກອງແລ ແລະ ນາຍພົນວ່າງປາວ ເພື່ອຕໍ່ສູ້ ຄ.ມ. ນ. ວຽດນາມເໜືອ ພ້ອມໄດ້ຝຶກນັກບິນ ຕ-28 ລາວ ແລະ ໄດ້ສົ່ງເຄື່ອງບິນ (T-28) ຫລາຍລຳ ໃຫ້ຣັຖບາລລາວ.

ໃນວັນທີ່ 27 ເດືອນກຸມພາ (February) 1963, ເຈົ້າຊີວິດສີສວ່າງວັທນາ ແລະ ຄນະຣັຖບາລລາວ ທີ່ອ້າງຕົນເອງ ວ່າຣັຖບາລເປັນກາງ ໄດ້ໄປຢ້ຽມຢາມສະຫາຣັຖ ແລະໄດ້ຟັງຄຳອະທິບາຍຫລາຍຢ່າງຈາກທ່ານ ປະທາທິບໍດີສະຫາຣັຖອາເມຣິກາ ທ່ານແຄນເນດີ ຕາມຮູບທີ່ມີຕໍ່ໄປນີ້. ສົງຄາມໃນອິນດູຈີນໄດ້ລຸກຂຶ້ນເປັນໄຟ ຢູ່ໃນຣາຊອານາຈັກລາວແລະ ວຽດນາມໃຕ້ ນັບຕັ້ງແຕ່ຕົ້ນປີ 1963 ເປັນຕົ້ນມາ ຈົນເຖິງ ປີ 1975. ສຸດທ້າຍ ຝ່າຍທີ່ຕໍ່ສູ້ຮ່ວມກັບສະຫາຣັຖ ຕ້ອງໄດ້ຮັບຄວາມເຈັບແສບຢ່າງນັກ ເພາະຂາດຜູ້ໃຫ້ການຊ່ວຍເຫລືອຕໍ່ໄປ.




*<u>ຮູບທີ່ 39</u>. ທ່ານປະທານາທິບໍດີສະຫະຣັຖທ່ານແຄນເນດີ ໄດ້ອະທິບາຍ ເຫດການສູນເສັຍຖານທັພຖຽນບຽນຜູ ແມ່ນຕົ້ນຕໍເຮັດໃຫ້ເກີດຄວາມ ເປັນຫ່ວງ ຈຶ່ງເກີດສົງຄາມວຽດນາມ*




*<u>ຮູບທີ່ 40</u>. ທ່ານປະທານາທິບໍດີສະຫະຣັຖ ກຳລັງສຶກສາເຫດການ ຕ່າງໆ ທີ່ເກີດຂຶ້ນໃນລາວ ເພາະວຽດນາມເໜືອ ລະເມີດສັນຍາ ແລະ ລຸກລານ ລາວ.*


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 41</u>. ທ່ານປະທານາທິບໍດີສະຫະຣັຖທ່ານແຄນເນດີໄດ້ເຊີນເຈົ້າຊີວິດ ແລະຄນະຣັຖບາລເປັນກາງ ລາວໄປຢ້ຽມຢາມສະຫາ ຣັຖໃນເດືອນກຸມພາ ວັນທີ່ 27,1963 ຫລັງຈາກນີ້ກໍເກີດສົງຄາມອິນດູຈີນ ວັນທີ່ 2 ມີນາ 1963 ຈົນເຖິງເດືອນພຶດສະພາ (May)ໃນປີ 1975. ຈາກຊ້າຍຫາຂວາ: ທ່ານແຄນເນດີ; ເຈົ້າຊີວິດ ສີສວ່າງວັທນາ; ເຈົ້າສຸວັນນາພູມາ; ທ່ານໂງ່ນ ຊະນະນິກອນ; ທ່ານພູ ມີ ວົງວິຈິດ ແລະ ຜູ້ຕິດຕາມ.*

# ການຈັດຕັ້ງຄ້າຍທະຫາຣໃນແຂວງຫົວພັນ

ໃນປີ 1962, ໄດ້ຈັດແຂວງຫົວພັນໃຫ້ມີຄ້າຍຕ່າງໆຂຶ້ນຫລາຍຄ້າຍ ຊຶ່ງສູນກາງແມ່ນຄ້າຍນາຄັງ (LS36) ເປັນເຂຕຍ່ອຍແຂວງຫົວພັນ ຂຶ້ນກັບເຂຕທະຫາຣພາຄສອງ ໄດ້ມອບໃຫ້ນາຍພົນ ວ່າງປາວເປັນ ຜ.ບ. ສໍາລັບຜ.ບ. ເຂຕຍ່ອຍນີ້ ມີນາຍທະຫາຣຫລາຍຄົນ ໄດ້ຮັບໃຊ້ການບັງຄັບບັນຊາຢ່າງດີ. ຄົນສຸດທ້າຍແມ່ນທ່ານ ພ.ອ. ຜັນ ສີຫາຣາຊ ທີ່ໄດ້ຕໍ່ສູ້ຈົນໄດ້ເສັຍຊີວິດຄາຄ້າຍໃນປີ 1969. ໃນເດືອນມີນາ (March) 1966, ຄ້າຍນາຄັງຖືກໂຈມຕີຈາກສັດຕຣູຢ່າງໜັກ ທ່ານນາຍພົລ ວ່າງປາວ ໄດ້ບິນເຄື່ອງບິນເຮລິໂຄບເຕີຂອງສະຫາຣັຖໄປສັງເກດການ ແລະໄດ້ລົງເດີນຍົນ ເພື່ອຈະໄປພົບ ຜ. ບ. ເຂຕ ຍ່ອຍແຕ່ໄດ້ຖືກທະຫາຣຂອງສັດຕຣູ ຍິງບາດເຈັບສາຫັດ ຕາມລາຍງານດັ່ງນີ້: ມື້ໜຶ່ງກ່ອນທ່ານນາຍ ພົນວ່າງປາວ ຈະເດີນທາງໄປກວດເບິ່ງສະພາບການຢູ່ຄ້າຍທະຫາຣນາຄັງນັ້ນ, ເຮືອບິນໄດ້ລໍາລຽງສະບຽງອາຫາຣ ແລະເອົາເຂົ້າໄປຖິ້ມໃຫ້ທະຫາຣຢູ່ຄ້າຍນາຄັງ, ສັດຕຣູໄດ້ຣະດົມກໍາລັງໄປສູ້ຣົບ ຍາຕເອົາເຂົ້າທີ່ເຄື່ອງບິນມາຖິ້ມລົງ, ໂດຽໃຊ້ເລ່ຫລ່ຽມຍິງປືນໃຫ່ຍມາໃສ່ສນາມບິນ ເຮັດໃຫ້ຝ່າຍມິຕບໍ່ສາມາດ ໄປເກັບເອົາເຂົ້າ ໄດ້ໂຈະໄວ້ມື້ໃໝ່ຈຶ່ງໄປເກັບ.




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສັດຕຣູຈຶ່ງໄດ້ໂອກາສໄປຍາດເອົາເຂົ້າໃນຄ່ຳຄືນນັ້ນ ຫລັງຈາກໄດ້ເອົາເມັດເຂົ້າອອກຈາກເປົາເຂົ້າແລ້ວ ກໍເອົາຂອງປອມໃສ່ແທນເບິ່ງຄືເປົາທີ່ມີເຂົ້າເຕັມຢູ່. ບາງເອີນມື້ຕໍ່ມາ ທ່ານນາຍພົລວ່າງປາວໄດ້ຂື້ນ ເຄື່ອງບິນເຮລີໂຄບເຕີໄປລົງຈອດແທບເດີນຍົນຕ໌, ໄດ້ໂດດອອກຈາກເຄື່ອງບິນ, ພໍດີສັດຕຣູທີ່ລີ້ຢູ່ໃນເປົາເຂົ້າກໍຍິງປືນໃສ່ຍົນຕ໌ເຮລີໂຄບເຕີທັນທີ, ບັງເອີນລູກກະສູນໄດ້ດາດຍົນຕ໌ ແລ້ວຕະເລີນໄປຖືກທີ່ບ່າຂອງທ່ານນາຍພົລວ່າງປາວ. ທັນໃດນັ້ນ ທະຫາຣອາຣັກຂາຂອງທ່ານໄດ້ຍິງໃສ່ສັດຕຣູຕາຍຄາເປົາເຂົ້າ. ເວລານັ້ນຍົນຕ໌ເຮລີໂຄບເຕີໄດ້ບິນໜີໄປ. ທະຫາຣຈຶ່ງໄດ້ເອົານາຍພົລ ວ່າງປາວ ໄປໄວ້ບ່ອນທີ່ປອດພັຍແລ້ວ ຍົນຕ໌ເຮລີໂຄບເຕີ ຈຶ່ງໄດ້ກັບມາເອົາທ່ານນາຍພົນ ຂຶ້ນເຄື່ອງບິນໄປໃສ່ເດີນຍົນຕ໌ໃຫ່ຍ ແລ້ວຂຶ້ນເຄື່ອງບິນກາຣິບູໄປອຸດອນ ແລ້ວຕໍ່ໄປຣາວາຍ ສະຫາຣັຖເພື່ອຮັກສາພະຍາບາລ ປະມານໜຶ່ງເດືອນ ເມື່ອດີແລ້ວ ຈຶ່ງໄດ້ກັບຄືນປະເທສລາວ.

ໃນຕົ້ນປີ 1967 ທ່ານບິວແລສ ແລະ ທ່ານນາຍພົນ ວ່າງປາວ ໄດ້ຂຶ້ນໄປແຂວງຫົວພັນ ໄປສຶກສາຕັ້ງສະຖານີແຣດາໃສ່ພູຜາທີ ຈຶ່ງໄດ້ເອີ້ນວ່າ (LS85). ໃນຮູບທີ່ 42 ທ່ານທັງສອງ ກຳລັງຢືນຢູ່ (LS367) ໄກ້ໆ ພູຜາທີ.

ໃນເດືອນກູມພາ (February) ປີ 1969, ສັດຕຣູໄດ້ຣະດົມກຳລັງຢ່າງມະຫາສານ ປິດລອ້ມຄ້າຍນາຄັງ, ແລ້ວໂຈມຕີຢ່າງໜັກ, ການສູ້ຣົບດັ່ງກ່າວໄດ້ເຮັດໃຫ້ຝ່າຍມິດເສັຍຄ້າຍນາຄັງ, ເສັຍ ພ.ອ. ຜັນ ສີຫາຣາຊ ແລະທະຫາຣຫລາຍຄົນຢູ່ໃນຄ້າຍຖືກຂ້າຕາຍ ຫລື ຖືກຈັບໄປ. ຄ້າຍພູກູ້ມ (LS50) ຊຶ່ງເປັນຄ້າຍຮັກສາແນວຫລັງຂອງຝ່າຍມິຕໃຫ້ຄ້າຍນາຄັງ ໄດ້ເສັຍໃຫ້ສັດຕຣູ ພ້ອມກັນ ຍາມດຽວແລະໃນປີດຽວ.

ຄ້າຍທະຫາຣທີ່ຕັ້ງຢູ່ອ້ອມແອ້ມຄ້າຍພູຜາທີ (LS85) ດ້ານຕາວັນອອກ ມີຄື: ຄ້າຍເມືອງລາບ, ຄ້າຍຫົວເມືອງ, ຄ້າຍຫວ້ຍຕົງຂໍ, ຄ້າຍຫວ້ຍໝາ, ຄ້າຍບ້ານຫວ້ຍສະວຽນ (ບ້ານເກີດຂອງ ພ.ຕ. ເກັ່ງຕູ້ ຫວາລືວ່າງ) ເປັນ ຜ.ບ. ແລະ ຜູ້ວາງແຜນປ້ອງກັນພູຜາທີ ຄ້າຍຫວ້ຍສະວຽນໄດ້ ຕັ້ງຢູ່ຕີນພູຂອງພູຜາທີ.

ຄ້າຍຕັ້ງຢູ່ດ້ານຕາວັນຕົກ ຂອງພູຜາທີ ມີຄື: ຄ້າຍຫວ້ຍຄຳມູນ, ຄ້າຍພູແດນດິນ, ຄ້າຍປາກຄາ, ຄ້າຍບ້ານເພັຍຄຳ ແລະ ຄ້າຍຫວ້ຍຫລອຍ. ທຸກໆຄ້າຍດັ່ງກ່າວນີ້ໄດ້ຕົກໃຫ້ສັດຕຣູ ພ້ອມກັນໃນ ເວລາດຽວກັນໃນວັນທີ່ 9 ເດືອນມີນາ (March) 1968 ແລ້ວຕໍ່ມາກໍແມ່ນຄ້າຍພູຜາທີ ໃນວັນທີ່ 11 ເດືອນມີນາ (March) 1968.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*<u>ຮູບທີ່ 42</u>. ທ່ານບິວແລຣ໌ ໄປພົບ ກັບ ທ່ານນາຍພົນ ວ່າງປາວ ໃນ ປີ 1965 ທີ່ ລີມາໄຊ 367 ໃກ້ພູຜາທີ ແຂວງຫົວພັນ (Billair and General Vang Pao) ໄປຢ້ຽມເບິ່ງ ພື້ນທີ່ ທີ່ ພູຜາທີ ເພື່ອສ້າງ ສະຖານີເຣດາ ຊີ້ບອກການໂຈມຕີທາງອາກາສ ໃສ່ວຽດນາມເໜືອ ອ້ອມແອ້ມແຖບຮ່າໂນ່ຍ.*

## ຄ້າຍດຽນບຽນຝູແລະຄ້າຍພູຜາທີເປັນຈຸດຍຸທສາດສຳຄັນທີ່ສຸດ

ຄ້າຍພູຜາທີ ເປັນຈຸດຍຸທສາຕສຳຄັນທີ່ສຸດດ້ານການທຳສົງຄາມກັບວຽດນາມເໜືອຄອມມຸຍນິສຕ໌ ເພາະເປັນພູສູງ ຕັ້ງຢູ່ໂດດດ່ຽວ, ຫາທາງຂຶ້ນໄປບໍ່ງ່າຍ ເໜືອໄປກວ່ານີ້ ເປັນພູທີ່ຕັ້ງຢູ່ບໍ່ໄກຈາກຊາຍແດນ ຂອງວຽດນາມເໜືອ. ສະຫາຣັຖຈຶ່ງຕັດສິນໃຈໄປຕັ້ງສະຖານີເຣດາ (Radar Station) ໃສ່ເພື່ອ ຕິດຕາມການເຄື່ອນໄຫວຂອງສັດຕຣູຢູ່ພາກເໜືອຂອງລາວ, ໃຫ້ການແນະນຳດ້ານການໂຈມຕີທາງອາກາສ ຂອງ ສະຫາຣັຖໃສ່ວຽດນາມເໜືອ ໂດຍສະເພາະຢູ່ອ້ອມແອ້ມເຂຕເມືອງຮ່າໂນ່ຍ ແລະໃຫ້ການຊອກຄົ້ນຄ້ວຫາເຄື່ອງບິນແລະນັກບິນ ທີ່ຖືກສັດຕຣູຍິງຕົກຢູ່ວຽດນາມເໜືອ ສະດວກແລະທັນກັບເວລາ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ເຫດການຫລາຍແນວທີ່ໄດ້ເຮັດພູຜາທີເສັຍ

ບັນຫາລະຫວ່າງສອງທ່ານຄື: ຜູ້ບັງຄັບບັນຊາເທິງພູ ແລະ ອ້ອມຮອບຕີນພູຜາທີ ທີ່ຂາດຄວາມເຂົ້າໃຈກັນ ໃນດ້ານການວາງແຜນປ້ອງກັນພື້ນທີໄວ້ລ່ວງໜ້າຢ່າງດີ ທາງຂັ້ນຣະດັບພາຄເອງບໍ່ໄດ້ຮູ້ນຳ; ຂາດການຊອກຫາຂ່າວ ຫລືຄົ້ນຫາການເຄື່ອນໄຫວຂອງສັດຕຣູ ດ້ານການລາດຕະເວນເລາະຕາມຕີນພູກໍບໍ່ເຂັ້ມຄັດ ພໍມີຊ່ອງຫວ່າງ ພາໃຫ້ໜ່ວຍກອງຈົນກ້າຕາຍຂອງສັດຕຣູ ລອດຂຶ້ນໄປຕາມເສັ້ນທາງເສັ້ນດຽວ ທີ່ຝ່າຍມິຕໄດ້ໃຊ້ເປັນປະຈຳ ຂຶ້ນໄປໂຈມຕີຮອດເທິງພູຜາທີ. ຂາດກຳລັງໜູນຫລັງ ແລະການຊ່ວຍເຫລືອ ຈາກທາງອາກາສຂອງສະຫາຣັຖ ທີ່ພາໃຫ້ທະຫາຣໝົດກຳລັງໃຈຕໍ່ສູ້ ເພາະສັດຕຣູມີອາວຸທຮ້າຍແຮງ ແລະກຳລັງພົລກໍເໜືອກວ່າຝ່າຍມິຕ. ດັ່ງນີ້ ຈຶ່ງຕ້ອງໄດ້ເສັຍພູຜາທີ ແລະ ພື້ນທີ່ທັງໝົດໃນພາຄສອງ 60 ເປີເຊັນໃຫ້ສັດຕຣູໃນວັນທີ່ 11 ເດືອນມີນາ (March) ປີ 1968.

## ຄວາມຈິງຂອງສິ່ງແວດລ້ອມພູຜາທີ

ພູຜາທີ ເປັນພູສູງຢູ່ໂດດດ່ຽວ ແລະ ຊັນທີ່ສຸດ; ມີທາງຂຶ້ນໄປຫາຍອດຂອງພູເຂົາຮ່ອມດຽວ ຫາກປ້ອງກັນດີ ແມ່ນສັດຕຣູບໍ່ມີທາງຂຶ້ນໄປໄດ້ງ່າຍໆ ສັດຕຣູໄດ້ໃຊ້ໜ່ວຍກ້າຕາຍ ລອດໄຕ່ໄປຕາມຮ່ອມທາງຂຶ້ນທີ່ຝ່າຍ ມິດໃຊ້ປະຈຳ ຈຶ່ງຂຶ້ນໄປເຖິງຈອມພູຜາທີ (ເບິ່ງຕາມແຜນໂຈມຕີຂອງສັດຕຣູ ແຕ້ມ ສີແດງ); ກ່ອນການໂຈມຕີພູຜາທີ ຂອງສັດຕຣູວຽດນາມເໜືອໄດ້ໃຊ້ຍົນຕ໌ ສໄມເກົ່າໆເອເອັນເນີ (AN2) ສາມລຳບິນເຂົ້າໄປຖ່າຍຮູບພູຜາທີ ແລະໄດ້ຖິ້ມລະເບີດ ເຮັດດ້ວຍລູກປືນຂນາດ 120 ມ/ມ ໃສ່ເທິງ ພູຜາທີຫລາຍລູກ, ຝ່າຍມິດໄດ້ ໃຊ້ຍົນຕ໌ຊອບເປີ (Chopper) ໄລ່ຍິງຍົນເອເອັນເນີ ຂອງວຽດນາມເໜືອ ສອງລຳຖືກຍິງຕົກ ແຕ່ລຳທີ່ເຂົ້າມາກ່ອນໝູ່ ບິນລອດໜີໄປໄດ້ ຈຶ່ງໄດ້ຮູບໄປໃຊ້ວາງແຜນໂຈມຕີພູຜາທີ.

ໃນເດືອນພຶສຈິກາ (November) 1967, ສັດຕຣູໄດ້ທູ້ມເທກຳລັງອັນມະຫາສານ ບຸກໂຈມຕີທຸກໆ ຄ້າຍທະຫາຣໃນພາຄສອງຢ່າງໜັກ ໂດຽສະເພາະ ແມ່ນຢູ່ແຂວງຫົວພັນ. ທຸກໆຄ້າຍອອ້ມພູຜາ ທີ່ໄດ້ ຖືກໂຈມຕີກວດລ້າງຢ່າງຮູນແຮງ ພາໃຫ້ຂາດການຊ່ວຍເຫລືອຊຶ່ງກັນແລະກັນ ແລ້ວກໍຫຍໍ້ເຂົ້າໄປໃສ່ ພູຜາທີ ສັດຕຣູວຽດນາມ ໄດ້ໃຊ້ກຳລັງປະມານ 10 ຄົນ ຕໍ່ຝ່າຍມິດ 1 ຄົນ ເລີ່ມເຂົ້າບຸກໂຈມຕີ ພູຜາທີ ໃນຕົ້ນເດືອນມີນາ (March) 1968 ເລີ່ມແຕ່ 5:00 ໂມງແລງຈົນເຖິງທ່ຽງຄືນດ້ວຍປືນທຸກຊະນິດ ຄື: ປືນໃຫ່ຍ 122 ມ/ມ; 130 ມ/ມ; ປືນໃຫ່ຍ 120 ມ/ມ; ຈຣວດ 122 ມ/ມ ແລະ ປືນຍິງລູກລະເບີດທຸກຊນິດ ຍິງໃສ່ເທິງພູຜາທີ ແລະຄ້າຍທະຫາຣຂອງ ພ.ຕ. ເກັຍຕູ້ ຫວາ ລີ ວ່າງ ທີ່ຕີນພູ. ການຖລົ່ມດ້ວຍ ປືນໃຫ່ຍຂອງສັດຕຣູໄດ້ເຮັດໃຫ້ ພ.ອ. ຊົວຢາງ ໄດ້ໜີໄປຢູ່ຄ້າຍຫວ້ຍຕົງຂໍ ໄດ້ປະລູກນ້ອງ ໄວ້ເທິງພູຜາທີ ໂດຽຂາດຜູ້ບັງຄັບບັນຊາການ ຕໍ່ສູ້ກັບສັດຕຣູ ພ.ຕ. ເກັຍຕູ້ ວ່າງ ຜູ້ບັງຄັບກອງ ທະຫາຣຮັກສາ ເລາະ ຕາມຕີນພູຜາທີ ເຫັນ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ວ່າການໂຈມຕີຂອງ ສັດຕຣູໄດ້ຮ້າຍແຮງສຸດ ດ້ານປືນໃຫ່ຍ, ດ້ານກຳລັງ ບຸກ ໂຈມຕີມາຈາກທຸກດ້ານ, ການຊ່ວຍເຫລືອ ແລະ ການໜູນຫລັງກໍບໍ່ມີ ເພາະທະຫາຣ ສ່ວນຫລາຍ ຮຽນຝຶກແບບເປັນກອງໂຈນ ບໍ່ໄດ້ຮຽນຕໍ່ສູ້ປ້ອງກັນພື້ນທີ່ ຈຶ່ງຈຳເປັນຕ້ອງຕີຖອຍ ເຮັດໃຫ້ສັດຕຣູ ມີໂອ ກາດຍຶດພູຜາທີຢ່າງງ່າຍດາຍ.

**<u>ກຳລັງຝ່າຍມິດທີ່ຮັກສາພູຜາທີ ມີຄື:</u>**

ຢູ່ເທິງຈອມພູຜາທີ ມີທະຫາຣເຜົ່າມົ້ງປະມານ 250 ຄົນ; ກອງທະຫາຣໄທ໌ຍ ປະມານ 100 ກວ່າຄົນ; ນັກ ຊ່ຽວຊານດ້ານເຣດາ 17 ຄົນ ແລະ ພະນັກງານຂອງຊີໄອເອ 2 ຄົນ ຣວມເປັນ 19 ຄົນ. ຫາຍສາບສູນໄປ 11 ຄົນ, ຍັງ 8 ຄົນ ປອດພັຍ ແຕ່ເມື່ອເຄື່ອງບິນມາດຶງເອົາ ລອດຊີວິດ 7 ຄົນຜູ້ໜຶ່ງຖືກຍິງຕາຍເວລາຍົນຕ໌ດຶງຂຶ້ນ.  ທະຫາຣມົ້ງ ແລະ ທະຫາຣໄທ໌ຍ ບໍ່ຮູ້ຈຳນວນທີ່ລອດຊີວິດ ເທົ່າທີ່ຮູ້ ຫລາຍຄົນໄດ້ໂຕນຜາຕາຍ; ຫລືຖືກຂ້າຕາຍ ເພາະສັດຕຣູຂ້າບໍ່ຈີ່ງ. ກອງທະຫາຣທີ່ຮັກສາອອ້ມ ຕີນພູຜາທີ ມີປະມານ 800 ຄົນ ແມ່ນ ພ.ຕ. ເກ້ຍຕູ້ ເປັນຜູ້ບັງຄັບບັນຊາ ໄດ້ແຕກກະຈັດກະຈາຍ, ບໍ່ສາມາດຄຳນວນການ ເສັຍຫາຍໄດ້. ການເສັຍຫາຍຂອງສັດຕຣູ ບໍ່ຊາບເພາະເຂົາເປັນຜູ້ໄດ້ໄຊຍ໌ຊນະ ສົງຄາມດັ່ງກ່າວ. ຕາມຂ່າວສຸດທ້າຍ ຫລັງຈາກເຄື່ອງບິນເຮລີໂຄບເຕີ ໄດ້ເອົາຝ່າຍມິຕອອກໝົດແລ້ວ ຕໍ່ມາ ເຄື່ອງບິນ ເຕ-28 ແລະ ເຄື່ອງບິນໄອພົນ ໄດ້ໄປຖິ້ມລະເບີດໃສ່ຫລາຍຖ້ຽວ.

ໃນປີ 1965, ສັດຕຣູໄດ້ໂຈມຕີນ້ຳບັກ, ຢູ່ທາງພາຄເໜືອຂອງແຂວງຫລວງພະບາງ, ໂຈມຕີແຂວງສາ ຣະວັນຢູ່ພາຄໃຕ້ຂອງລາວ,ໂຈມຕີເດີນຍົນຕ໌ເຊໂນ, ແຂວງສວັນນະເຂດ ແລະໄດ້ສົ່ງຫລາຍກອງພົນທະຫາຣ ເຂົ້າໄປໃນດິນແດນຂອງລາວ. ເຫັນສະພາບການເຊັ່ນນີ້ ສະຫາຣັຖຈຶ່ງໄດ້ຕັດສິນໃຈສ້າງຖານທັບອາ ກາສ ຢູ່ອຸດອນ, ປະເທສໄທ໌ຍ, ເພື່ອສນັບສນຸນການສູ້ຣົບທາງອາກາສ ຊ່ວຍກອງທະຫາຣ ພາຄພື້ນ ດິນຢູ່ໃນລາວ, ແລະຢູ່ວຽດນາມ ພ້ອມໄດ້ໄປໂຈມຕີຖິ້ມລະເບີດໃສ່ວຽດນາມເໜືອຢ່າງໜັກ.






*<u>ຮູບທີ່ 43</u> (ຊ້າຍ). ນີ້ແມ່ນຮູບຂອງພູຜາທີ ທີ່ຫາທາງຂຶ້ນໄປເທິງຈອມພູບໍ່ ງ່າຍໆ.*

*<u>ຮູບທີ່ 44 (ຂວາ).</u> ຍົນເອເອນເບີ 2 (AN2) ຂອງ ວຽດນາມເໜືອ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1965, ສະຖານະການທາງການເມືອງຢູ່ໃນສະຫາຣັຖ ກຳລັງປັ່ນປ່ວນຮ້າຍແຮງຂຶ້ນ ຍ້ອນການເດີນຂະບວນປະທ້ວງຂອງນັກສຶກສາ ແລະ ປະຊາຊົນ ຕໍ່ຕ້ານສົງຄາມວຽດນາມ ທີ່ຣັຖບາລໄດ້ເກັບເກນ ຊາວໜຸ່ມອາເມຣິກັນ ໄປຕໍ່ສູ້ສົງຄາມຢູ່ວຽດນາມ ແລະໄດ້ທະວີຄູນຂື້ນຢ່າງບໍ່ຂາດສາຍ ຍ້ອນສະພາບການປ່ຽນແປງໃນວຽດນາມໃຕ້ຄື: ໃນປີ 1967, ສະຫະຣັຖໄດ້ຣະດົມກຳລັງທະຫາຣໄປເສີມ ແລະປ້ອງກັນຄ້າຍເຄຊານ ແລະເມືອງເວ້ ທີ່ຖືກໂຈມຕີຢ່າງໜັກ ຈາກສັດຕຣູວຽດນາມເໜືອ. ໃນເວລາດຽວກັນກັບ ພູຜາທີ ຖືກໂຈມຕີ ຍ້ອນເຫຕການດັ່ງກ່າວ ການສູ້ຮົບກັນຢູ່ພູຜາທີ ຈຶ່ງບໍ່ໄດ້ຮັບການຊ່ວຍເຫລືອທາງອາກາສຈາກສະຫາຣັຖ. ສັດຕຣູທີ່ໂຈມຕີພູຜາທີ ແມ່ນຊົນຊາຕຊົນເຜົ່າຈີນແດງ ສ່ວນຫລາຍເຂົ້າຊ່ວຍວຽດ ນາມເໜືອບຸກໂຈມຕີພູຜາທີ (LS85); ວຽດນາມເໜືອແລະວຽດກົງ ບຸກໂຈມຕີແຄຊານ ແລະ ເມືອງເວ້.

ພູຜາທີເສັຍ ໄດ້ເຮັດໃຫ້ສະພາບໃນລາວໄດ້ປ່ຽນແປງໄປ ດ້ານການເມືອງ ແລະ ການທະຫາຣ ຫລາຍຢ່າງ ຍ້ອນ ຄ.ມ.ນ. ໄດ້ສົ່ງກຳລັງ ອັນມະຫາສາຣ ພ້ອມດ້ວຍໄດ້ຮັບການສນັບສນູນ ອາວຸດອັນທັນສມັຍ ຈາກສະຫາພາບໂຊວຽດ  ຈຶ່ງໄດ້ເຮັດ ໃຫ້ຣາຊອານາຈັກລາວ ຕ້ອງສູນເສັຍພື້ນທີ່ໃຫ້ ວຽດນາມເໜືອໄປ 60 ເປີເຊັນ ທົ່ວປະເທສ ແລະ ພາຄ 2, ໃນ ປີ 1968 ແຂວງຫົວພັນ ເສັຍ 90 ເປີເຊັນ, ແຂວງຊຽງຂວາງ ເສັຍ 60 ເປີເຊັນ ເປັນຕົ້ນມາ ສຖານະການດ້ານທະຫາຣ ແລະດ້ານການເມືອງໄດ້ເຮັດໃຫ້ປະຊາຊົນ ຢ້ານ ກົວເສັຍຂັວນທົ່ວປະເທສ.

ໃນປີ 1965 ເຄື່ອງບິນໄອພິນຂອງສະຫາຣັຖ ໄດ້ອອກໄປປະຕິບັດງານຖິ້ມລະເບີດໃສ່ວຽດນາມ ເໜືອ, ເຄື່ອງບິນໄດ້ຖືກ ປ.ຕ.ອ. ຂອງສັດຕູ ຍິງຕົກ; ໃນຂນະນັ້ນ ພ.ອ. ທອງ ວົງຣາສມີ ເປັນ ຜ.ບ. ເຂຕຍ່ອຍແຂວງຫົວພັນ ຕັ້ງຢູ່ນາຄັງ (LS36) ໄດ້ຂຶ້ນເຄື່ອງບິນ ເພື່ອພານັກບິນຊອສເປີ ໄປຫາບ່ອນຍົນຕົກ, ໄປຊ່ວຍຊີວິດຂອງນັກບິນໄອພິນ. ແຕ່ ພ.ອ. ທອງໄດ້ຖືກຍິງເສັຍຊີວິດ, ຊ່ວຍນັກບິນອອກມາໄດ້ດ້ວຍ ຄວາມປອດພັຍ ແຕ່ ພ.ອ. ທອງ ຖືກສັດຕຣູ ໃຊ້ປືນກອ້ງຊ່ອງຍິງເສັຍຊີວິຕຄາເຊືອກ ທີ່ນັກບິນໄດ້ຢ່ອນ ລົງ.  ໄດ້ເອົາສົບໄປ ທຳພິທີສົ່ງສະການຢູ່ນະຄອນວຽງຈັນທນ໌.
ຫລັງຈາກໄດ້ເສັຍພູຜາທີໃຫ້ສັດຕຣູແລ້ວໃນມື້ຕໍ່ມາ ພ.ຕ. ເກັຍຕູ້ ໄດ້ຂຶ້ນເຄື່ອງບິນປອກເຕີ ຢ້ອນກັບໄປເວີ່ນອ້ອມພູຜາທີເພື່ອຕິດຕໍ່ຊອກຫາລູກນ້ອງ ທະຫາຣຝ່າຍມິດ ໄດ້ແຕກກະຈັກກະຈາຍຢູ່ອ້ອມພູຜາທີ ທ່ານ ເກັຍຕູ້ ໄດ້ຂຶ້ນເຄື່ອງບິນ ປອກເຕີ (Porter) ແລ້ວໄດ້ຢືນຢູ່ປະຕູເຄື່ອງບິນແນມລົງລຸ່ມ ບິນຢູ່ ເທິງອາກາສຫລາຍລອບ ເຮັດໃຫ້ສັດຕຣູໄດ້ໂອກາສໃຊ້ ປືນກອ້ງສອ່ງຍິງຖືກໜ້າເອິກຂອງເກັຍຕູ້ ເສັຍຊີ ວິດຢູ່ເທິງອາກາສ. ການສູນເສັຍພູຜາທີ ໄດ້ເຮັດໃຫ້ ທ່ານນາຍພົນ ວ່າງປາວ ຂາດ ຄວາມໝັ້ນໃຈກັບ ພ.ອ. ຊົວຢ່າງ. ດັ່ງນັ້ນ ຕັ້ງແຕ່ເສັຍພູຜາທີມາ ພ.ອ. ຊົວຢາງ ຈຶ່ງບໍ່ໄດ້ຮັບໜ້າທີ່ສຳຄັນ ເປັນພຽງຜູ້ ກວດຣາຊການຝ່າຍທະຫາຣທົ່ວໄປໃນພາຄ 2 ແລະ ເປັນທີ່ ປືກສາບາງຢ່າງ ຫລື ກໍບໍ່ຖືກໃຊ້ໃນໜ້າທີ່ ເມື່ອເຫັນວ່າມີຄວາມສຳຄັນ ແລະຕ້ອງການຂອງພາຄສອງ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



Three sides of Phou Pha Thi were nearly vertical; the fourth was heavily fortified. Lima Site 85 perched on the very top of the bluff. (Joint Task Force-Full Accounting photo)



Since 1994, Joint POW/MIA Accounting Command has made trips to Laos and Vietnam, gathering information about the fate of Americans at Phou Pha Thi. In this photo, a JTF-FA investigator rappels down the sheer face of the mountain. (JTF-FA photo)

*<u>ຮູບທີ່ 45</u> (ຊ້າຍ). ນີ້ແມ່ນຈອມພູຜາທີ ຊັນ ແລະສູ່ງ ຊື່ງສະຫາຣັດໄດ້ໄປ ຕັ້ງ ເຣດາໃສ່ ໃນປີ 1967 ເພື່ອນຳເຄື່ອງບິນໄປຖີ້ມລະເບີດໃສ່ວຽດນາມເໜືອ ແຖວ ຮ່າໂນຍ.*

*<u>ຮູບທີ່ 46</u> (ຂວາ). ນີ້ແມ່ນພາບໄຖ່ 1994 ທີ່ສະຫາຣັດກັບໄປ ຄົ້ນຫາສົບນັກຊ່ຽວຊານ ທີ່ ຫາຍສາບສູນ 11 ຄົນໃນປີ 1968 ຢູ່ເທີງພູຜາທີ.*



A new painting by aviation artist Keith Woodcock, "An Air Combat First," depicts a confrontation in 1968 in which two North Vietnamese aircraft crashed. (Courtesy Of Keith Woodcock)




*<u>ຮູບທີ່ 47</u> (ຊ້າຍ). ຍົນເອເອນເນີ AN2 ກຳລັງຖືກຍົນເຮລີໂຄບເຕີ Bell 212 helicopter ໄລ່ຍິງ ໃນ ວັນທີ່ 12 ເດືອນມັງກອນ (January) 1968, ຢູ່ທີ່ພູຜາທີ LS85.*

*<u>ຮູບທີ່ 48</u> (ຂວາ). ຍົນ (AN2) ຖືກຍິງຕົກ ເອົາໄປໂຊຢູ່ລ້ອງແຈ້ງ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



<u>ຮູບທີ່49.</u> ທ່ານນາຍພົນ ວ່າງປາວ ກຳລັງຢູ່ເທິງ ພູຜາທີ ໄດ້ແນມເບິ່ງອ້ອມແອ້ມ ພູຜາທີເພື່ອວາງແຜ່ນປ້ອງກັນໃນຕົ້ນປີ 1967.




<u>ຮູບທີ່ 50</u>. ຈາກຊ້າຍຫາຂວາ ພ.ອ ທອງ ວົງຣາຊມີ ແມ່ນຜູ້ໄປເອົານັກ ບິນ ອາເມຣິກາທີ່ຖືກຍິງຕົກຢູ່ວຽດ ນາມເໜືອ. ເອົາໄດ້ ນັກບິນ ອອກມາຢ່າງປອດໄພ໌ຍ ແຕ ພ.ອ. ທອງ ຖືກຍິງເສັຍຊີວິດ; ທ່ານ ພາບ ບົວ; ພ.ອ ຄຳເສົາ ແກ້ວວິໄລ ແລະ ພ.ອ. ດວງຕາ ບໍຣະສິງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
[www.unforgettable-laos.com](www.unforgettable-laos.com)

ຖານທັບດຽນບຽນຝູ ແມ່ນຈຸດຍຸທສາຕ ສຳຄັນທີ່ສຸດ ພາໃຫ້ເກີດສົງຄາມຢູ່ໃນພູມີພາຄ ແຫ່ງອິນດູຈີນ ແລະ ເປັນບົດຮຽນທີ່ດີໃຫ້ ສະຫາຣັຖໃນການຕັດສິນໃຈເຊື່ອໂຮຈິມິນ ຫລາຍກວ່າເຊື່ອພັນທະມິດຂອງ ຕົນ. ເສັຍດຽນບຽນຝູ ໄດ້ສ້າງພາບພົດອັນສັ່ນສະເທືອນໃຫ້ຝ່າຍໂລກເສຣີ ຍ້ອນຢ້ານລັດທິຄອມມຸຍນິສຕ໌. ສະຫາຣັຖຈຶ່ງໄດ້ເຂົ້າໄປພົວພັນການປ້ອງກັນ ຄ.ມ.ນ. ບໍ່ໃຫ້ຂຍາຍຕົວໄປສູ່ເອເຊັຍຕາວັນອອກສ່ຽງໃຕ້ ຈຶ່ງ ເກີດສົງຄາມອິນດູຈີນ ແລະ ໄດ້ໃຊ້ເຄື່ອງບິນໂຈມຕີວຽດນາມເໜືອ. ເພື່ອຕິດຕາມ ແລະ ນຳພາການໂຈມ ຕີໃຫ້ໄດ້ຜົລ ຈຶ່ງເກີດສະຖານີເຣດາ ທີ່ພູຜາທີ ຂຶ້ນ.

ພູຜາທີ (LS85) ກໍເໝືອນກັນ ເປັນຈຸດຍຸທສາຕທີ່ສຳຄັນສຸດຕັ້ງຢູ່ໃກ້ໆ ກັບຊາຍແດນວຽດນາມເໜືອ ເປັນ ຖານທັພ ທີ່ຊູ່ຂວັນດ້ານການໂຈມຕີທາງອາກາສໃສ່ວຽດນາມເໜືອ. ໂຮຈິມິນ ຕ້ອງຊອກທຸກວິທີທາງ ເພື່ອທຳລາຍໃຫ້ໄດ້ ເພື່ອເປັນກຳລັງໃຈຂອງກອງທັພໂຮຈິມິນ, ແຕ່ສະຫາຣັຖເຫັນວ່າສົງຄາມໃນວຽດນາມ ໃຕ້ສຳຄັນກວ່າ ແລະໃຫ້ກຽດສັນຍາຄວາມເປັນກາງຂອງລາວ ສຳຄັນກວ່າ, ຈຶ່ງເກີດເປັນປວັດສາຕ ຊ້ຳ ຮອຍ ຄືສົງຄາມດຽນບຽນຝູ ໃຫ້ຄອມມຸຍນິສຕ໌ໄດ້ໄຊຍ໌ຊະນະ.




*ຮູບທີ່ 51.*
*ແຜນຂອງວຽດນາມເໜືອເຂົ້າໂຈມຕີ ພູຜາທີໃນຕົ້ນເດືອນມີນາ ປະມານ ວັທີ່ 9 ປີ 1968 ເລີ່ມບຸກບັກທີ່ສຸດຕາມ ເຊັ້ນແດງຂຶ້ນໄປຫາພູຜາທີ LS85 ຈຶ່ງໄດ້ຕີກໃຫ້ສັດຕຣູໃນວັນທີ່ 11 ເດືອນມີນາ 1968.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຖິງຢ່າງໃດກໍຕາມ ສະຫະຣັຖໄປຕໍ່ສູ້ສົງຄາມຢູ່ໃນອິນດູຈີນ ແມ່ນໄປທົດລອງອາວຸທ, ໄປໃຫ້ບົດຮຽນ ແກ່ຄອມມຸຍນິສຕ໌ ໃຫ້ຮູ້ວ່າ: ຜົລຂອງການທຳສົງຄາມນັ້ນ ມັນຮ້າຍແຮງຂນາດໃດ ຕອນທ້າຍປະເທສ ທີ່ເປັນຫົວໂປ່ຂອງຄອມມຸຍນິສຕ໌ ກໍໄດ້ພັງທະລາຍລົງໄປເອງ ເຮັດໃຫ້ຫລາຍປະເທສໃນພາຄີ ຂອງ ຄ.ມ.ນ. ກໍໄດ້ກັບຄືນມີເອກກະຣາຊ ແລະ ຮູ້ໜ້າກາກລັດທີອັນແທ້ຈິງຂອງຜູ້ນຳ ຄ.ມ.ນ. ພະເດັດການ "ຍ້ອນສົງຄາມວຽດນາມ".

# ພາຄທີ່ 3.

# ການຂຍາຍດ້ານທາງທະຫານຫລັງຈາກເສີກພູຜາທີ

ໃນກາງປີ 1968 ທ່ານນາຍພົນວ່າງປາວໄດ້ແຜນ ເຂົ້າບຸກ ຍຶດພື້ນທີ່ຄືນ ຈາກສັດຕຣູເທື່ອທຳອິດຂອງ ພາຄ 2 ທີ່ເອີ້ນວ່າ "ແຜນກູ້ກຽດ" ອັນມີຈຸດໃຫ່ຍໆດັ່ງຕໍ່ໄປນີ້:

**ກ**-ສົ່ງປະມານໜຶ່ງກຣົມເຂົ້າໄປຍຶດບໍຣິເວນເມືອງຊຽງຂວາງ;
**ຂ**-ສົ່ງປະມານໜຶ່ງກຣົມ ເຂົ້າໄປຍຶດບໍຣິເວນທົ່ງໄຫຫີນ.
**ຄ**-ສົ່ງ ປະມານສອງກຣົມ ເຂົ້າໄປຍຶດພູຜາທີ (LS85)

ໃນເດືອນກໍຣະກະດາ (July) 1968, ແມ່ນຍາມລະດູຝົນ, ທ່ານນາຍພົລວ່າງປາວໄດ້ໂຮມກຳລັງ ແລ້ວ ບຸກໂຈມຕີສັດຕຣູ ໄປຕາມຈຸດຕ່າງໆ ຄື: ບຸກຈາກພູແຄ ໄປຫາຕົວເມືອງຊຽງຂວາງ ຍຶດຄ້າຍເກົ່າພູກະ ເບາະ ພູຈອງວອງ ຍຶດຕົວເມືອງຊຽງຂວາງ ທຳລາຍສາງອາວຸດ ແລະ ປືນ ປ.ຕ.ອ. 37 ມ/ມ; ປືນໃຫ່ຍ 122 ມ/ມ ຫລາຍກະບອກ, ຍຶດໄດ້ຣົຖຖັງ, ຍຶດໄດ້ສະບຽງອາຫາຣຫລາຍຢ່າງຂອງສັດຕຣູ, ທຳລາຍສັດ ຕຣູໃນພູຖ້ຳກາບ ຕາຍປະມານ 374 ຄົນ ແລະໄດ້ພົບສາງ ຢາປົວຄົນບາດເຈັບ ຢ່າງຫລວງຫລາຍຂອງ ຝ່າຍສັດຕຣູ ທີ່ໄດ້ເຊື່ອງ ໄວ້ໃນຖ້ຳກາບ ໄກ້ເດີນຍົນຕ໌ເມືອງຊຽງຂວາງ. ການເຂົ້າຊຽງຂວາງ, ທົ່ງໄຫຫີນ ແລະເມືອງສຸຍເທື່ອນີ້ ນາຍພົລ ວ່າງປາວໄດ້ຂົນເອົາອົພຍົບຊາວຊຽງຂວາງ ປະມານຊາວພັນຄົນ (20,000) ໄປຢູ່ທ່າລາດ ໄກ້ເຂື່ອນນ້ຳງື່ມ, ແຂວງວຽງຈັນຫນ໌. ໄດ້ຂົນອາວຸທທີ່ຍຶດໄດ້ຈາກສັດຕຣູມາໂຊ ຢູ່ລ່ອງແຈ້ງ ແລະກໍໄດ້ເຊີນນັກຂ່າວ ໄປເບິ່ງ ແລະອອກຂ່າວທົ່ວໂລກ ໃຫ້ຮູ້ວ່າວຽດນາມຄອມມຸຍນິສຕ໌ ໄດ້ລຸກລານລາວຢ່າງແທ້ຈິງແບບໃດ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ແຜນເຂົ້າໂຈມຕີທົ່ງໄຫຫີນ**

ເຂົ້າໄປຍຶດທົ່ງໄຫຫີນໃນປີ 1968, ພິຕຣີວ່າງປາວ ໄດ້ເອົາກຳລັງຂອງໄທຍ໌ໄປເສີມໃຫ້ກອງແລ ຢູ່ເມືອງສຸຍ LS108 ເພື່ອປ້ອງກັນເມືອງສຸຍໄວ້ໃຫ້ໄດ້. ໃນຂນະນັ້ນ ກອງແລໄດ້ຍ້າຍກອງບັນຊາການໄປຕັ້ງຢູ່ເມືອງກາສີ LS18 (LS = Lima Site) ໄດ້ບຸກຈາກຊຳທອງ ໄປຫາພູຫລວງມາດ, ບ້ານນາ, ພູເຊື້ ລົງໄປຫາເມືອງພົ້ນ ເຂົ້າທົ່ງໄຫຫີນ.

ເລີ່ມຕົ້ນ ກອງພັນທີ່ນຳໜ້າແມ່ນກອງພັນພີ່ນ້ອງເຜົ່າລາວເທີງ ຜ.ບ. ກອງພັນ ແມ່ນ ພ.ຕ. ທ້າວລື້ ໄດ້ເປັນນັກລົບເກົ່າຝຣັ່ງເສສ ສໄມປີ 1950 ຫາ 1954. ພ.ຕ. ທ້າວລື້ໄດ້ຂຶ້ນຍຶດ ພູຫລວງມາດໄວ້ໄດ້, ແຕ່ດ້ວຍຄວາມບໍ່ລະວັງ ພ.ຕ. ທ້າວລື້ ໄດ້ສັ່ງລູກນ້ອງ ຊື້ເຫລົ້າໄປສະຫລອງໄຊ໌ຍຊນະ ພໍຕອນແລງຂອງມື້ນັ້ນ ກຳລັງມ່ວນແລະເມົາຢູ່ ສັດຕຣູໄດ້ສົ່ງໜ່ວຍກອງໂຈນດັກກົງ ເຂົ້າບຸກໂຈມຕີສູນກາງທີ່ໝັ້ນຂອງ ພ.ຕ. ທ້າວລື້ ໃນຄ່ຳຄືນນັ້ນ ຢ່າງຟ້າແຫລບ ພາໃຫ້ທະຫາຣກັບນາຍ ພ.ຕ. ທ້າວລື້ ໄດ້ເສັຍຊີວິດ ພ້ອມກັນ 120 ຄົນ. ກອງພັນລາວເທີງຕ້ອງຈົບລົງຕັ້ງແຕ່ນັ້ນມາ ເພາະຂາດຜູ້ນຳ. ນາຍພົນ ວ່າງປາວ ໄດ້ສົ່ງກຳລັງໃໝ່ໄປແທນຈຶ່ງໄດ້ບຸກໄປຮອດທົ່ງໄຫຫີນ. ທ່ານຍຶດໄດ້ຄ້າຍເກົ່າຫລາຍບ່ອນ ແລະໄດ້ທຳລາຍສາງອາວຸທ ແລະ ປືນ ປ.ຕ.ອ. ແບບ 37 ມ/ມ ປືນໃຫ່ຍ 122 ມ/ມ ຫລາຍກະບອກ.

ການເຂົ້າທົ່ງໄຫຫີນ ແລະເມືອງສຸຍເທື່ອນີ້ ທ່ານນາຍພົລວ່າງປາວໄດ້ຂົນເອົາໄຫຫີນສາມໄຫ. ໄຫທີ່ໜຶ່ງໄປໃສ່ໂຮງການ ແຂວງທີ່ຊຳທອງ, ໄຫທີ່ສອງ ໄປໃສ່ພຣະຣາຊວັງທີ່ຫລວງພຣະບາງ ແລະໄຫທີ່ສາມ ໄດ້ມອບໃຫ້ເອກ ອັຄະຣາຊທູຕສະຫາຣັຖປະຈຳລາວ ນຳເອົາໄປໄວ້ຢູ່ຫໍພິທະພັນແຫ່ງຊາຕສະຫະຣັຖ ທີ່ວໍຊີງຕັນດີຊີ (National Museum in Washington, D.C.) ແລະໄດ້ຂົນປະຊາຊົນແຂວງຊຽງຂວາງ ຫລາຍພັນຄົນໄປຢູ່ທາລາດ ແຂວງວຽງຈັນທນ໌. ບໍ່ດົນ ກໍຕ້ອງແຕກຄືນເພາະອາກາສອຳໂນຽໃຫ້ຝ່າຍສັດຕຣູໄດ້ເຄື່ອນ ຣິຖຖັງ ແລະ ຣົຖຂົນສົ່ງ ພ້ອມດ້ວຍກອງກຳລັງອັນມະຫາສານ ມາໂຈມຕີຝ່າຍມິດໃນທ້າຍປີ 1968 ແລະ ໃນຕົ້ນປີ 1969, ກອງພົນ 312 ຂອງວຽດນາມເໜືອ ແລະ ຫລາຍກົມດັກກົງ ພ້ອມກັນໄດ້ເປີດສາກ ໂຈມຕີຝ່າຍມິດເປັນສາມໜ້າກະດານດັ່ງນີ້:

1. ເປີດສາກບຸກລຸກໂຈມຕີຝ່າຍມິຕທີ່ເຂົ້າໄປຍຶດເມືອງຊຽງຂວາງ ມາຫາຜ່າຂາວ ແລະລອ່ງແຈ້ງ;
2. ເປີດສາກໂຈມຕີຝ່າຍມິຕທີ່ເຂົ້າໄປຍຶດທົ່ງໄຫຫີນ ແລ້ວຕິດຕາມຝ່າຍມິດໄປຫາພູຫລວງມາດ ແລະ ພູຜາໄຊ ຫາ ຊຳທອງ, ຫີນຕັ້ງ (LS74) ຈຶ່ງໄດ້ເສັຍ ຊຳທອງ (LS20) ໃນທ້າຍປີ 1968. ເລີ້ມເດືອນມັງກອນ January 1969, ສັດຕຣູ ວຽດນາມເໜືອໄດ້ບຸກເຖີງລ່ອງແຈ້ງ ຕາມແຜນຍຸທສາຕລຸ່ມນີ້.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

3. ເປີດສາກໂຈມຕີທະຫານໄທຍ໌ ທີ່ຮັກສາເມືອງສຸຍເສັຍໃນຕົ້ນ 1969. ຝ່າຍມິດໄດ້ຖອຍກັບຄືນ ເພາະບໍ່ມີກໍາລັງເສີມໜູນຫລັງ ສັດຕຣູຈຶ່ງມີກໍາລັງເໜືອກວ່າ. ການປະເຊີນໜ້າ ກັບການຕໍ່ສູ້ສັດ ຕຣູ ຢູ່ແນວໜ້າເກີນກວ່າ 6 ເດືອນຂຶ້ນໄປ ໂດຍບໍ່ມີການສັບປ່ຽນ ກໍພາໃຫ້ມີກໍາລັງໃຈຕໍ່າ; ອິດ ເມື່ອຍ,ໃຈອ່ອນ, ຂວັນກໍເສັຍ. ເໜືອໄປກວ່ານີ້ ສັດຕຣູຍັງມີອາວຸດຕໍ່ສູ້ດີກວ່າ ຄື: ຣິຖັງ, ປືນ ໃຫ່ຍຫລາຍຊນິດ ແລະ ຈະຣວດຫລາຍຊນິດທີ່ຍິງໄດ້ລະຍະໄກກວ່າຂອງຝ່າຍມິດ.

## ປວັດຂອງທ່ານ "ທອມລອມ" ທີ່ປຶກສາຂອງສະຫາຣັຖ

## ຢູ່ໃນທະຫາຣພາຄ 2

ເກີດຢູ່ເມືອງແຊງລຸຍ ຣັດມິຊູຣີ (St. Louis, MO.) ເປັນລູກຂອງຊາວຈີນ ຍົກຍ້າຍມາຢູ່ ສະຫາຣັຖ. ຫລັງ ຈາກຈົບການສຶກສາມະຫາວິທະຍາໄລໃນປີ 1960, ໄດ້ຖືກສົ່ງໄປຮຽນຝ່າຍນາຍທະຫາຣ ຢູ່ທີ່ສູນຝຶກ ເມືອງແບນນິງ (Ft.Benning, GA). ທີ່ນັ້ນໄດ້ຝຶກເປັນນັກໂດດຈອັງເໜືອນກັນ ແລະໄດ້ຮັບເປັນນັກຮຽນ ບິນຝຶກຍົນຕ໌ ຝ່າຍທະຫາຣສໍາເຣັດໃນປີ 1962 ແລ້ວ ໄດ້ຖືກສົ່ງໄປຮັບໃຊ້ຢູ່ກອງພົນການບິນ 82 ສູນກາງຕັ້ງຢູ່ຟອດແບຣກ (82nd Airbone Division at Ft. Bragg, NC) ໄດ້ໄປປະຕິບັດໜ້າທີ່ ຢູ່ວຽດນາມໃຕ້ໜຶ່ງປີ ຄືຂັບເຄື່ອງບິນຫລາຍໝາກປີກ ບິນໂຈມຕີສັດຕຣູ ຊ່ວຍໜ່ວຍ ເຄື່ອນທີ່ທະຫາຣພາຄ ເວລາອອກຣົບກັບສັດຕຣູ. ຫລັງຈາກວຽກຢູ່ວຽດນາມແລ້ວ ໄດ້ເປັນຄຣູຝຶກນັກຮຽນ ຂັບເຄື່ອງບິນຫລາຍ ໝາກປີກ ຢູ່ສູນຝຶກທີ່ 11 ຟອດແບນນິງ (Ft. Benning, GA). ທ່ານທອມລອມ ລາອອກຈາກ ຝ່າຍຄຣູຝຶກ ແຕ່ຍັງເປັນຝ່າຍທະຫາຣ ເຂົ້າໄປຮ່ວມງານນໍາໜ່ວຍສາຍລັບ (CIA). ໃນປີ 1968 ໄດ້ຖືກໄປປະຈໍາການຢູ່ເມືອງລາວ ໄດ້ຮັບໜ້າທີ່ບິນເຄື່ອງບິນຊອກຂ່າວພາຍໃນລາວສອງປີ ແລະໄດ້ເປັນ ທີ່ປຶກສາໃຫ້ທະຫາຣ ພາຄ 2 ຄື: ກຣົມ 25 ແລະ ກຣົມ 26 ຮ່ວມກັບນາຍທະຫາຣລາວ ທ່ານ ວ່າງເລັງ (Leng Wong). ທ່ານທອມລອມ ໄດ້ຈົບການຝຶກເປັນນາຍທະຫາຣ ຢູ່ຂັ້ນມະຫາວິທະຍາໄລ ໃນປີ 1987. ລາອອກ ໄດ້ຕິດຊັ້ນເປັນພັນເອກ ໃນປີ 1993 ແລະ ກິນເງິນເບັ້ຍບໍານານຈາກ ຊີໄອເອ (CIA).


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com





*รูบທີ່ 52. ທ່ານ ພ.ອ. ທອມລອມ ແລະ ເດັກທະ  ຫານນ້ີ້ງ ໃນ 1968 .*

*ຮູບທີ່ 53. ທາດ ເກົ່າແກ່ ຢູ່ຕົວເມືອງ ຊຽງຂວາງ ຊື່ທາດດຳ.*



*ຮູບທີ່ 54. ທ່ານພ.ອ. ທອມ ລອກາໍ ລັງຢືນຢູ່ກັບຣົຖຂົນທະຫານຂອງ ວຽດນາມເໜືອ ທີ່ຖືກທຳລາຍໃນປີ 1968 ເວລາເຂົ້າໄປ ຕີຍຶດເມືອງ ຊຽງຂວາງ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 55</u>.*

*ຍົນຕ໌ໄດ້ ຖີ້ມລະເບີດໃສ່ຖໍ້າກາບ ຄືຄວນທີ່ຂາວ ໃນຮູບນີ້.*
*ຈາກຄວັນຂາວ ລົງມາໃສ່ຜາ ເບື້ອງໃຕ້ແມ່ນເດີ່ນ ຍົນຊຽງຂວາງ*



*<u>ຮູບທີ່ 56</u>. ລະເບີດຖືກຖໍ້າ ໄດ້ທຳລາຍທະຫານແກວຫລາຍຮ້ອຍຄົນ ຈຶ່ງເປັນບົດຮຽນໃຫ້ແກວບໍ່ໃຊ້ຖໍ້າເປັນ ທີ່ ຫລົ້ໄພຍ ຕັ້ງ ແຕ່ນັ້ນມາ ມີແຕ່ຂຸດຂູມຫລົ້. ໄດ້ຂ່າວວ່າປະຈຸບັນ (ຫລັງຈາກປີ 1976) ວຽດນາມ ເໜືອໄດ້ມາ ພັທນາຖໍ້ານີ້ໄວ້ເປັນບ່ອນລະລຶກ ເຖິງທະຫານ ວຽດນາມເໜືອ ທີ່ມາຕາຍຢູ່ໃນຖໍ້ານີ້ ຫລາຍກວ່າ 375 ຄົນໃນປີ 1968.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 57. ພ.ອ. ທອມລອມ ກຳລັງເຂົ້າໄປກວດເບິ່ງຖ້ຳກາບ ທີ່ຖືກທຳລາຍ ວ່າເປັນແບບໃດ.*



*ຮູບທີ່ 58. ພ.ອ. ທອມລອມກຳລັງກວດເບິ່ງ ອາວຸດ ແລະ ກະສູນທີ່ຍຶດໄດ້ໃນປີ 1968*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 59, 60, 61 ແລະ 62</u>. ທະຫາຣວຽດນາມເໜືອຕາຍຢູ່ໃນຖ້ຳກາບ ຫລາຍຮ້ອຍຄົນຍ້ອນຖືກຍິນຕ໌ຖິ້ມລະເບີດໃສ່ໃນປີ 1968. ຮູບນີ້ ບໍ່ມີປະ ຊາຊົນ ມີແຕ່ທະຫາຣແກວ. ລາວແດງໄດ້ຈັດເປັນ ສະຖານທີ່ລະລຶກປະຊາຊົນຖືກຂ້າຕາຍ. ແມ່ນຈັດເປັນທີ່ລະລຶກແກ່ທະຫາຣ ແກວຄອມມຸຍນິສ ທີ່ມາຕໍ່ສູ້ ແລະຕາຍຢູ່ໃນຖ້ຳນີ້ ຫລັງຈາກຖືກຍິງໃນຖ້ຳນີ້ ແລ້ວ ທະຫາຣແກວບໍ່ຍອມໃຊ້ຖ້ຳອີກ. ເຂົາຂຸດຂູມສະເພາະຄົນດຽວ.*



*<u>ຮູບທີ່ 63</u>. ປືນ 37 ມ/ມ ທີ່ ຍຶດໄດ້ຢູ່ໃນຊຽງຂວາງໃນປີ 1968 ຮູບນີ້ແມ່ນຖາຍຢູ່ໃກ້ໆເດີນສນາມ ຊຽງຂວາງ ແລະ ຖ້ຳກາບ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 64</u>. ກອງພັນເບເວ 24 ນຳພາໂດຍ ທ່ານວື້ໄມ ຄົນກາງ ທີ່ຈັບເຈັ້ຍສີຂາວ ແລະ ຖືໝວກ ເບເຣ ສີແດງ ແມ່ນຜູ້ນຳ ກອງພັນ (BV24) ໃນປີ 1968 ໄປຕີເຂົ້າຊຽງຂວາງ. ໃນປີ 1975 ທ່ານໄດ້ອົພະຍົບໄປຮອດເມືອງໄທຍ໌ແຕ່ ທ່ານບໍ່ໄດ້ໄປ ປະເທສທີ່ສາມ ໄດ້ຕັດສິນໃຈນຳພາອົພະຍົບກູ່ມໜຶ່ງ ກັບໄປເມືອງລາວ ເພື່ອເຂົ້າຮ່ວມກັບລາວຄອມມຸຍນິສຕ໌ ລູກນ້ອງແກວໄດ້ເສັຍຊີວິດ ຢູ່ລາວ ໃນບໍ່ດົນຕໍ່ມາ ບໍ່ມີຜູ້ໃດຮູ້ ວ່າເສັຍຊີວິດແບບໃດ ແລະ ດ້ວຍເຫຕອັນໃດ ເພາະເພິ່ນຢູ່ໃນກຳມື ຂອງຄອມມຸຍນິສຕ໌ ຈຶ່ງບໍ່ໄດ້ເປີດເຜີຍອອກ.*



*<u>ຮູບທີ່ 65</u>. ລູກກະສູນປືນ ຫລາຍ ຊນິດທີ່ຍຶດໄດ້ຈາກ ສັດຕຣູ ວຽດນາມເໜືອ ທີ່ ຊອັນໄວ້ໃນຖ້ຳກາບ ໄກ້ໆ ເມືອງຊຽງຂວາງ ໃນປີ 1968 ຈາກ ແຜນກູ້ກຽດ ຂອງ ທ່ານນາຍພົນຕຣີ ວ່າງປາວ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

 

*<u>ຮູບທີ່ 66</u> (ຊ້າຍມື). ບ້ານເຮືອນແພພັງ ບໍ່ມີບ່ອນຢູ່ ປະຊາຊົນໃນຊຽງຂວາງ ຕ້ອງໄດ້ ພາກັນໜີໃຫ້ພົ້ນອັນຕລາຍ. ໃນປີ 1968 ທ່ານນາຍພົນ ວ່າງປາວ ຈຶ່ງຕ້ອງໄດ້ຂົນປະຊາຊົນ ຊາວຊຽງຂວາງ ປະມານ 20,000 ຄົນ ລົງໄປຢູ່ທາລາດ ໃກ້ໆ ເຂື່ອນ ນ້ຳງື່ມ ແຂວງວຽງຈັນທນ໌.*
*<u>ຮູບທີ່ 67</u> (ຂວາມື). ປະຊາຊົນ ກຳລັງ ລໍຖ້າ ຍົນຕ໌ ເພື່ອອົພຍົບ ໜີໄປຢູ່ທີ່ປອດພັຍໃນທົ່ງຮາບ ແຂວງວຽງຈັນທນ໌ ໃນປີ 1968.*

 

*<u>ຮູບທີ່ 68</u> (ຊ້າຍ). ນີ້ແມ່ນ ເຕ-28 ໃສ່ບອມຕຽມເຂົ້າຊ່ວຍການເຄື່ອນທີ່ຂອງ ຝ່າຍມິຕ ໄດ້ທຸກເວລາ.*
*<u>ຮູບທີ່ 69</u> (ຂວາ). ນີ້ແມ່ນເດີນຍົນຕ໌ ເມືອງຊຽງຂວາງ ບໍ່ຫ່າງໄກຈາກເບື້ອງໃຕ້ ຖ້ຳກາບທີ່ຖືກ ຍົນຕ໌ ທຳລາຍໃນປີ 1968*



*<u>ຮູບທີ່ 70</u>. ພ.ອ. ເນັ່ງຈີ້ທ່າວ ແລະນາຍພົນວ່າງປາວກຳລັງຜູກແຂນຕອ້ນຮັບພນະທ່ານເຈົ້າ ສີສຸກນະຈຳປາສັກຢ້ຽມຢາມພາຄ 2 ເພື່ອສັນລເສີນ ທ່ານນາຍພົນ ວ່າງປາວ ໃນໄຊຍຊະນະ ແຜນລຸກລົບ "ກູ້ກຽດ". ໃນ 1968. ນາຍພົນ ວ່າງປາວໄດ້ຈັດ ພິທີ ຜູກແຂນ ອອຍພອນໃຫ້ແກ່ພະນະທ່ານທີ່ໃຫ້ກຽດມາຢ້ຽມຢາມ ທະຫາຣພາຄ 2.*



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*ແຜນທີ່ 71. ສັດຕຣູໄດ້ສົ່ງກອງພົນ 312 ແລະຫລາຍກຣົມເຂົ້າມາບຸກພື້ນທີ່ພາຄສອງ ຂອງນາຍພົນວ່າງປາວ ຕ້ອງສູນເສັຍໜັກ ໄດ້ຖອຍກັບ ເສັຍຊຽງຂວາງຄືນ, ເສັຍບ້ານນາ, ຄັງໂຄ້, ປ່າດົງ, ພູຜາໄຊຍ, ພູຫລວງມາດ, ຫີນຕັ້ງ ແລະຊຳທອງ ນອກນີ້ ລ່ອງແຈ້ງ ຍັງຖືກຖະລົ່ມດ້ວຍປືນໃຫ່ຍ 130 ຢ່າງໜັກອີກ.*


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com





*<u>ຮູບທີ່ 72</u>. ທ່ານ ບິວແລສ ກັບໄປ ຢ້ຽມຢາມລ່ອງແຈ້ງ .*

*<u>ຮູບທີ່ 73</u>. ທ່ານເບີສະມິດ (Burr Smith US agent)* ຢືນຢູ່ຂ້າງໄຫຫີນ





*<u>ຮູບທີ່ 74</u>. ປືນໃຫ່ຍ 76 ມ/ມ ຂອງວຽດນາມເໜືອຖືກທຳລາຍ.*

*<u>ຮູບທີ່ 75</u>. ປືນ 82 ມ/ມ ແລະ 61 ມ/ມ ຂອງວຽດນາມເໜືອ*

ໃນເດືອນ ກໍຣະກະດາ (July) 1968, ແມ່ນຍາມລະດູຝົນທ່ານນາຍພົນວ່າງປາວ ໄດ້ຮຽກຮ້ອງ ຂໍພັນທະມິຕຈາກປະເທສໄທຍ໌ໄປຊ່ວຍຫລາຍກອງພັນ ເພື່ອໄປຊ່ວຍຮັກສາພື້ນທີ່ອ້ອມແອ້ມລ່ອງແຈ້ງ ແລະຊຳທອງ ແລ້ວໃນເດືອນສິງຫາ 1968, ນາຍພົນວ່າງປາວໄດ້ຣະດົມກຳລັງທະຫາຣປະມານສອງກຣົມ ສົ່ງທາງອາກາສໄປ ລົງໄກ້ຫວ້ຍຕົງຂໍ ແລ້ວໄດ້ໂຈມຕີສັດຕຣູ ຫຍໍ້ເຂົ້າໄປໃສ່ພູຜາທີ ໄດ້ອອ້ມພູໄວ້ ແລະໄດ້ໂຈມຕີສັດຕຣູ ໂດຽການສນັບສນຸນຈາກທາງອາກາສຂອງສະຫາຣັຖ ແລະ ເຕ-28 ຂອງກອງ ທັພອາກາສລາວ ໄດ້ບຸກໂຈມຕີເອົາທີ່ໝັ້ນພູຜາທີຄືນ. ການບຸກໂຈມຕີ ໄປເທິງຍອດພູ, ແຕ່ບໍ່ສາມາດ ຄຶບຄານ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂຶ້ນໄປໄດ້, ເພາະວ່າຄອມມຸຍນິສຕ໌ ໄດ້ວາງກຳລັງປ້ອງກັນທາງຂຶ້ນ ໄປຢ່າງ ແໜ້ນໜາ, ສູ້ຕາຍ ກັບທີ່. ຢູ່ເທິງພູ ກໍມີປືນ ປ.ຕ.ອ. ຫລາຍກະບອກ ຍິງຕໍ່ຕ້ານບໍ່ໃຫ້ຍົນຕ໌ເຮລີໂຄບເຕີລົງໄດ້. ຍົນຕ໌ເຮ ລີໂຄບເຕີ ຫລາຍລຳກໍຖືກຍິງ, ຍົນຕ໌ໄອພົນ ໜຶ່ງລຳຖືກຍິງຕົກ. ການເຂົ້າໄປຍຶດພູຜາທີຄັ້ງນີ້ ບໍ່ໄດ້ ເກີດຜົລ, ເພາະ ສັດຕຣູມີກຳລັງເໜືອກວ່າ ໄດ້ໂຈມຕີຝ່າຍມິດມາຈາກທຸກດ້ານພ້ອມໆກັນ ເຮັດໃຫ້ທຸກຈຸດ ທີ່ຫາ ກໍໄປ ຍຶດໄດ້ບໍ່ດົນ ຕ້ອງເສັຍຄືນທັງໝົດ.



*<u>ຮູບທີ່ 76</u>. ປືນອາກາ 47, ປືນເບ 40 ແລະ ລູກເບ40 ຂອງວຽດນາມເໜືອຍຶດໄດ້ໃນ 1968*

ສັດຕຣູໄດ້ກວດລ້າງໄປເຖິງນາຄັງ (LS36) ຊຶ່ງເປັນສູນກາງບັນຊາການເຂດຍ່ອຍແຂວງຫົວພັນ, ສັດ ຕຣູໄດ້ ປິດລ້ອມ ແລະໂຈມຕີໜັກ ເຮັດໃຫ້ນາຄັງໄດ້ເສັຍໄປໃຫ້ຄອມມຸຍນິສຕ໌ ໃນເດືອນກຸມພາ ປີ 1969. ຈຶ່ງເຮັດໃຫ້ແຂວງຫົວພັນ ໄດ້ຕົກໃຫ້ຄອມມຸຍນິສຕ໌ 100 ເປີເຊັນເລີ່ມຕັ້ງແຕ່ຕົ້ນປີ 1969 ແລະໄດ້ເສັຍ ນາຍທະຫາຣຜູ້ສຳຄັນ ຢູ່ໃນຄ້າຍນາຄັງ LS36 ຄື ພ.ອ. ຜັນສີຫາຣາຊ (ຮູບຕໍ່ໄປນີ້ ພ້ອມດ້ວຍລູກ ນ້ອງຫລາຍຄົນ).

ໃນລະຫວ່າງ ປີ 1961-1965, ເຂດທະຫາຣພາຄ 2 ໄດ້ຮັບການຊ່ວຍເຫລືອຈາກສະຫາຣັຖ ໃນຫລາຍ ດ້ານ:

- ດ້ານທະຫາຣ ແມ່ນທ່ານແຢນ ດາບບຣີຢູແລ (James W. Lair ) ເປັນຜູ້ເບິ່ງແຍງໃຫ້ການຊ່ວຍ ເຫລືອດ້ານອາວຸທທຸກຊະນິດ ທີ່ມີຄວາມຈຳເປັນໃນການຕໍ່ສູ້ກັບສັດຕຣູວຽດນາມເໜືອ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ດ້ານພົລະເຮືອນແມ່ນທ່ານພອບບົວ (Pop Buell) ເປັນຜູ້ເບິ່ງແຍງໃຫ້ການຊ່ວຍເຫລືອດ້ານເຄື່ອງໃຊ້, ດ້ານອາຫານ ແລະສິ່ງຂອງທີ່ຈຳເປັນ ເພື່ອໃຫ້ຢູ່ລອດໃນຍາມເປັນອົພະຍົບ ເພາະຊາວອົພະຍົບໄດ້ເສັຍສິ່ງຂອງທຸກຢ່າງ.




*<u>ຮູບທີ່ 77</u>. ພຣະເຈົ້າມະຫາຊີວິດສີສວ່າງວັທະນາ ກຳລັງມອບລຽນຕຣາຄຳຊອບ ໃຫ້ແກ່ຂ້າຣາຊການ ແລະ ນາຍທະຫານຊັ້ນສູງ ຢູ່ໃນເຂດທະຫານພາກສອງ ທີ່ລ່ອງແຈ້ງໃນປີ 1965 ຮູບ ພ.ອ. ພັນສີຫາຣາຊ ແມ່ນຜູ້ຢູ່ກາງ ໄກ້ທ່ານເຈົ້າແຂວງສາຍຄຳ ທີ່ໃສ່ຊຸດສີດຳ*

ໃນປີ 1967-1970, ການຊ່ວຍເຫລືອຈາກສະຫາຣັຖໃຫ້ພາຄ 2 ແມ່ນ:

- ດ້ານທະຫານແມ່ນທ່ານແປສ ແລນດຣີ (Pat Landry) ທ່ານໄດ້ເຖິງແກ່ກັມໃນວັນທີ່ 29 ເດືອນທັນວາ (died in Texas December) 2005 ຢູ່ ແຕສຊັຕ ສະຫາຣັຖອາເມຣິກາ.
- ດ້ານປະຊາຊົນ ແມ່ນອົງການ ຢູເສດ (USAID) ເປັນຜູ້ໃຫ້ການຊ່ວຍເຫລືອຕາມເຄີຍ ຈົນເຖິງວັນທີ່ 14 ເດືອນພຶດສພາ (May) ປີ 1975.

ເລີ່ມແຕ່ ປີ 1970 , ດ້ານທະຫານ ແມ່ນທ່ານແຢຣີ ດານິວເປັນຜູ້ໃຫ້ການຊ່ວຍເຫລືອ ຈົນເຖິງ ປີ 1973. ຫລັງຈາກລາວສາມຝ່າຍໄດ້ມາຮ່ວມກັນ ໄດ້ປ່ຽນໂຄງການຊ່ວຍເຫລືອດ້ານພັທນາ ຄືໂຄງການປູກຝັງ, ລ້ຽງສັຕ, ການຄົ້ນຄົ້ວບໍ່ແຮ່ຕ່າງໆໃນພາຄ 2. ແຕ່ວັນທີ່ 15 ພຶດສພາ (May) 1975 ຫາ 1982 ທ່ານແຢຣີໄດ້ໃຫ້ການຊ່ວຍເຫລືອເບິ່ງແຍງ ຊາວອົພະຍົບພາຄ 2 ທີ່ໄດ້ໄປລີ້ໄພ້ຍຢູ່ໃນຣາຊອານາຈັກໄທ໌ຍ. ທ່ານໄດ້ເສັຍຊີວິດ ຢູ່ບ້ານພັກ ໃນປະເທສໄທ໌ຍ ໃນປີ 1982.



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນວັນທີ່ 23 ເດືອນກໍຣະກະດາ (July) 1963, ກອງທະຫາຣຝ່າຍກາງປະສົມທະຫາຣຄອມມຸຍນິສຕ໌ ວຽດນາມເໜືອໄດ້ໂຈມຕີຄ້າຍພູຜາໄຊຍ໌; ຄ້າຍບ້ານຄັງໂຄ້ (LS204) ບ້ານທ່ານເຈົ້າເມືອງ ຢົ້ວຕົງຢາງ. ທ່ານນາຍພັນໂທ ວ່າງປາວໄດ້ສົ່ງກໍາລັງກັບໄປໂຈມຕີ ແລະຍຶດໄດ້ຄ້າຍທັງສອງຄືນ. ທ່ານໄດ້ຂຶ້ນຊັ້ນ ເປັນພັນເອກຂອງກອງທັພແຫ່ງຊາຕ ແລະໄດ້ເປັນຜູ້ບັນຊາການເຂຕທະຫາຣພາຄ 2 ຕັ້ງແຕ່ນັ້ນມາ ຈົນ ເຖິງວັນທີ່ 14 ເດືອນພຶດສພາ (May) 1975.



*<u>ຮູບທີ່ 78</u>. ນາຍທະຫາຣ ຜູ້ຕາງໜ້າຣາຊອານາຈັກໄທ໌ຍ ແລະ ທ່ານນາຍພົນ ວ່າງປາວ ທ່ານເບີຣສະມິດ ຮູບ ຢູ່ລ່ອງແຈ້ງ 1968*



*<u>ຮູບທີ່ 79</u>. ຜູ້ໃສ່ກາຣາວັດ ສີແດງແມ່ນ ທ່ານພາດແລນດຣີ (Pat Landry), ທ່ານວ່າງເປີ, ທ່ານວິນສຊີວ (Vince Shields) ຫົວໜ້າ ຊີໄອເອ ປະຈໍາຢູ່ລ່ອງແຈ້ງ ແມ່ນຜູ້ກໍາລັງເຊັນໜັງສື. ຮູບຖ່າຍໃນປີ 1970.*

ໃນປີ 1963, ທະຫາຣຝ່າຍກາງ ແລະ ທະຫາຣວຽດນາມເໜືອ ໄດ້ບຸກໂຈມຕີຄ້າຍປ່າດົງ (LS05); ຄັງໂຄ້ (LS204) ແລະພູຜາໄຊຍ໌. ຝ່າຍມິດໄດ້ສູນເສັຍຄັງໂຄ້ ແລະຄ້າຍພູຜາໄຊຍ໌ ໃຫ້ສັດຕຣູແລະ ປ່າດົງ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ກໍຢູ່ໃນເປົ້າໝາຍການຍິງປືນໃຫ່ຍຂອງສັດຕຣູ. ທ່ານ ພ.ອ. ວ່າງປາວ ຈື່ງໄດ້ຕັດສິນໃຈໄປສ້າງຄ້າຍ ຢູ່ຜາຂາວ (LS14) ທ່ານໄດ້ຂຶ້ນຊັ້ນເປັນນາຍພົນຈັດຕະວາ ຂອງກອງທັພແຫ່ງຊາຕ (ຮູບຕໍ່ໄປນີ້ແມ່ນ LS14). ໃນປີ 1964, ເມື່ອເຫັນວ່າເດີນຍົນຕ໌ຜາຂາວ ສັ້ນແລະ ມີອັນຕຣາຍ ຕໍ່ນັກບິນ ເວລາຂຶ້ນແລະລົງ, ທ່ານນາຍພົນຈັດຕະວາ ວ່າງປາວ ຈື່ງໄດ້ນຳພານັກຊ່ຽວຊານສະຫະຣັຖ ໄປສຶກສາເບິ່ງສະຖານທີ່ ເພື່ອສ້າງສນາມບິນໃໝ່ຂຶ້ນ ຢູ່ທີ່ລ່ອງແຈ້ງ. ເມື່ອນັກຊ່ຽວຊານເຫັນວ່າເໝາະສົມ ຈື່ງໄດ້ລົງມືສ້າງສນາມບິນລ່ອງແຈ້ງ ໃນປີ 1964 ແລະໄດ້ໃສ່ຊື່ວ່າ (L20A) ຢູ່ຮູບຕໍ່ໄປນີ້. ໃນຕົ້ນປີ 1964 ໃນເມື່ອເດີນຍົນຕ໌ສ້າງຮຽບຮ້ອຍ ແລ້ວ ທ່ານນາຍພົລວ່າງປາວ ໄດ້ສົ່ງກຳລັງທັບໄປຍຶດພູຜາໄຊຍ ແລະຕັ້ງໂຕ້ຄືນ. ທ່ານໄດ້ຂຶ້ນຊັ້ນ ເປັນພົລ ຕຣີຂອງກອງທັບແຫ່ງຊາຕລາວ.



Jerry Daniels, Long Cheng, 1973 (Mouasu Bliaya collection).

*ຮູບທີ່ 80. ທ່ານ ແຢຣີດານີວ (Jerry Daniels) ຮູບຖ່າຍ ໃນປີ 1973 ຢູ່ລ່ອງແຈ້ງ*




ຮູບທີ່ 81 ເດີນຍົນ ຜາຂາວໃນປີ 1964 ລີມາໄຊ 14 ( LS 14 )


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ໝາຍເຫດ**: ການກັບໄປຍຶດເອົາພູຜາໄຊຍ໌ ຜູ້ບັງຄັບບັນຊາກອງພັນ ຊື່ ທ່ານ ຣ.ອ. ໜາວເຮີ ວ່າງ ຖືກສັດຕູຂ້າຕາຍໃນ ເດືອນກັນຍາ (September) 1964.



*ຮູບທີ່ 82. ເດີ່ນຍົນລ່ອງແຈ້ງໃນປີ 1971* (LS20A)

# ສນາມບິນ ແລະ ລີມາໄຊ

## (Air strip and Lima Sites)

ສນາມບິນລ່ອງແຈ້ງ (**L 20A**) ແມ່ນຢູ່ໃນພື້ນທີ່ແຂວງຊຽງຂວາງ ແລະ ຕັ້ງຢູ່ໃນລະຫວ່າງກາງແຂວງຊຽງຂວາງ ແລະແຂວງວຽງຈັນຫນ໌ ຢູ່ທາງທິສເໜືອຂອງເຂື່ອນນ້ຳງື່ມ ບິນທາງອາກາສ ກິນເວລາປະມານ 30 ນາທີ ຈາກວຽງຈັນຫນ໌ຫາລ່ອງແຈ້ງ; ຊຶ່ງຢູ່ທາງທິສໃຕ້ຂອງທົ່ງໄຫຫີນ ບິນທາງອາກາສຫາກັນ ປະມານ 15 ນາທີ. ສນາມບິນລ່ອງແຈ້ງກວ້າງ ປະມານ 500 ແມຕຣ໌ ແລະ ຍາວປະມານ 1,500 ແມຕຣ໌. ພື້ນທີ່ ລ່ອງແຈ້ງ ມີປະມານ 750,000 ແມຕຣ໌ກາເຣ (ຕະລັງແມຕຣ໌ມົນທົນ). ມີພູເຂົາຂັ້ນສາມຕອນຄື: ລ່ອງແຈ້ງກາງ ຫລື ລ່ອງແຈ້ງສນາມບິນ; ລ່ອງແຈ້ງເໜືອ ຫລືສະຖານີລາວຮວມເຜົ່າ" ແລະ ລ່ອງແຈ້ງໃຕ້ ຫລື ລ່ອງແຈ້ງຕາວັນອອກຂອງບ້ານພີ່ນ້ອງຊາວເຜົ່າລາວເທີງ."

ສນາມບິນຕ່າງໆທີ່ມີລີມາໄຊ (Lima Site) ເພື່ອບອກເຕືອນນັກບິນໃຫ້ຮູ້ໄປລົງ ຄື: ສນາມບິນວັດ ໄຕ ວຽງຈັນຫນ໌ (Vientiane L08); ສນາມບິນເມືອງກາສີ (Muong Kasy LS18); ສນາມບິນ ເມືອງຫົງສາ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

(Muong Hongsa LS65); ສນາມບີນນ້ຳບັກ (Nambak LS54); ລ່ອງແຈ້ງ (LongTieng L20A); ຊຳທອງ (Samthong LS20B); ທົ່ງໄຫຫີນ (Plain of Jars LS22); ເມືອງສຸ້ຍ (Muong Soui LS 108); ຄ້າຍນາຄັງ (Nakhang LS36); ຄ້າຍບວມຫລົງ (Bouamlong LS32); ຄ້າຍ ພູກູ້ມ (Phou koum LS 50); ຄ້າຍສັນຈໍ້ (Sancho LS02); ຄ້າຍເມືອງໝອກ (Muong Mok LS46); ເມືອງຈ້າ (LS113) ປ່ຽນຊື່ເປັນເມືອງເດຊາ ຕອນເຈົ້າຊີວິດລາວໄດ້ໄປຢ້ຽມຢາມໃນປີ 1970 ປ່ຽນຊື່ໃໝ່ເປັນເມືອງ ໄຊສົມບູນ (ຊື່ປະຈຸບັນຂອງ ສປປລ); ຜາຂາວ (Phakhao LS14); ປ່າດົງ (Padong LS05); ຄັງໂຄ້ (Khang Kho LS204); ບ້ານາ (Ban Na LS15); ບ້ານຫີນຕັ້ງ (Ban Hine Tang LS74); ບ້ານນ້ຳ ແຟນ (Namfene LS224); ບ້ານພູແຮ່ ບ້ານຂອງເຈົ້າເມືອງລາວໄທ (Phou Hae LS255); ບ້ານພັກ ແຄ້ (Phak Khae LS353); ບ້ານພູກາງ (Phou Kang LS337); ບ້ານພູສັນ (Phou Sane LS240); ເມືອງພູນ ບ້ານຂອງເຈົ້າເມືອງ ຕູ້ເຊັ່ຍທ່າວ (Muong Phoune LS37). ເຄື່ອງໝາຍຢູ່ເທີງ ພູໝອກ ແຕ່ ທິສຕາວັນຕົກ ຫາທິສຕາວັນອອກ ຂອງສັນພູໝອກມີຄື: (CG; CC; CE; CB; CW; CA; and CT) (ຕາມຮູບຕໍ່ໄປນີ້) (Charles George; Charles Charles; Charles Echo; Charles Bravo; Charles Wisky; Charles Alfa and Charles Tango) “

ສັນພູ ສູງກວ່າໝູ່ດ້ານຕາວັນຕົກເອີ້ນວ່າ “ສະໄກໄລ ວອນ” (Skyline One) ສັນພູສູງກວ່າໝູ່ດ້ານຕາວັນ ອອກ ເອີ້ນວ່າ “ສະໄກໄລທູ” (Skyline Two). ພູຜາສູງດ້ານຕາວັນອອກ ສນາມບີນລ່ອງແຈ້ງ ເອີ້ນວ່າ




*ແຜນທີ່ 83.ບອກທີ່ຕັ້ງແລະຈຸດປ້ອງກັນ ສນາມບີນລ່ອງແຈ້ງ ຢູ່ຕາມສັນພູ ຂອງພູໝອກ ມີ CG,CC, CE, CB, CW, CA , CT*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພູ "ອາບໂປໂລ" (Appolo). ດ້ານໃຕ້ສນາມບິນລ່ອງແຈ້ງ ແມ່ນພູພຣະຣາຊວັງ ແລະ ດ້ານ ຕາວັນຕົກມີ ຫວ້ຍ ນ້ຳງື່ວ. ພູບາງດ້ານເໜືອ ຂອງສນາມບິນລ່ອງແຈ້ງ ທັງໝົດລວງຍາວແມ່ນ ພູໝອກ. ພູຕ່ຳ ແລະ ບາງທັງໝົດ ສນາມບິນລ່ອງແຈ້ງ ດ້ານທິສໃຕ້ ເອີ້ນວ່າພູພຣະຣາຊວັງ ສນາມບິນຈຶ່ງ ໄດ້ຕັ້ງຢູ່ໃນຮ່ອມພູ ຕ້ອງບິນລົງຫລືບິນຂຶ້ນທາງດຽວ ມາຈາກດ້ານຕາວັນອອກເດີ່ນຍົນຕ໌ ລ່ອງແຈ້ງມີພູ ຂັ້ນຕັນ ເດີນຍົນຕ໌ໃນທິສທາງ ຕາວັນຕົກ.



ຮູບ # 84. ຣົດຖັງສັດຕຣູ ທີ່ຖືກ ທະຫານນາຍພົນວ່າງປາວຍິງ ໃນປີ 1970 ຢູ່ທົ່ງໄຫຫີນ

## ສັນຍາລະຫວ່າງສາມເຈົ້າລາວ

ໃນປີ 1962, ສາມເຈົ້າລາວໄດ້ຕົກລົງກັນຈັດຕັ້ງຣັຖບານປະສົມສາມຝ່າຍ ເພື່ອນຳສັນຕິພາບມາສູ່ພຣະ ຣາຊອານາຈັກລາວ. ສະຖານະການໄດ້ນຳຄວາມຫວັງມາສູ່ປະຊາຊົນລາວທຸກຄົນ ວ່າລາວຕ້ອງມີຄວາມ ສະງົບ ຈະບໍ່ມີສົງຄາມອີກ. ທ່ານນາຍພົນວ່າງປາວ ຈຶ່ງໄດ້ວາງແຜນພັທະນາເຂຕທະຫາຣພາຄ 2 ດ້ານ ການກໍ່ສ້າງ; ດ້ານຊອັມແປງຖນົນຫົນທາງ, ດ້ານການຮັກສາພະຍາບາລ; ດ້ານການສຶກສາ ແລະດ້ານ ການປົກຄອງ. ທ່ານຈຶ່ງໄດ້ສ້າງຫອ້ງການແຂວງ, ຫອ້ງການເມືອງ, ໂຮງໝໍແລະຫອ້ງການສຶກສາຢູ່ຊຳ ທອງໃຫ້ເຈົ້າສາຍຄຳສຸທະກະກຸມາຣ ແລະສ້າງພຣະຣາຊວັງສຳຫລັບໄວ້ເປັນພຣະຣາຊນິເວສ (ທີ່ປຣະ ທັບ) ຂອງພຣະບາທສົມເດັຈພຣະເຈົ້າມະຫາຊີວິຕ ທີ່ຈະທຣົງພຣະຣາຊດຳເນີນ ມາປະພັສ ໃນຂັ້ນຕໍ່ໄປ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຫລັງຈາກສຳເຣັດການກໍ່ສ້າງແລ້ວ ທ່ານນາຍພິນ ໄດ້ກຣາບທູລພຣະເຈົ້າມະຫາຊີວິຕ ສີສຫວ່າງວັທນາ ທຣົງ ສເດັຈປະພັສພາຄ 2 ໄນປີ 1965. ພະອົງຈຶ່ງໄດ້ຕັ້ງນາຍພິຍພິນຈັຕະວາ ວ່າງປາວເປັນພິນຕຣີ ແລະ ຕັ້ງນາມມະຍົດ ເປັນພຣະຍາ ນໍຣະປະໂມກ (ໝາຍຄວາມວ່າ: ນໍຣະ=ກ້າຫາຣຄືສິງຫ໌, ປະໂມກ=ປຣະມຸກ ແມ່ນ ເຈົ້າສິງຫ໌ຜູ້ກ້າຫາຣ). ຫລັງຈາກການປະພັສຂອງພະອົງຄ໌ ສຖານະການກໍໄດ້ປ່ຽນແປງໄປຄື: ຝ່າຍ ກາງໄດ້ແຕກອອກເປັນ ສອງກາງຄື ກາງກອງແລ ແລະກາງນາຍເດືອນສຸນນະຣາຊ.



*<u>ຮູບທີ່ 85</u>.ເຈົ້າຊີວິດ ສີສຫວ່າງວັທະນາ ແລະ ຜູ້ນຳສຳຄັນໄປຢ້ຽມຢາມລ່ອງແຈ້ງຊຳທອງຄັ້ງທີ່ໜຶ່ງໃນປີ 1965.*

ຝ່າຍຄອມມຸຍນິສຕ໌ວຽດນາມເໜືອ ໄດ້ໂຈມຕີຝ່າຍກາງກອງແລະຝ່າຍຂ່ວາ. ສຖານະການໄດ້ເຮັດໃຫ້ ສະຫະຣັຖ ຕ້ອງເພີ່ມ ການໂຈມຕີທາງອາກາສໃສ່ຫລາຍແຫ່ງ ໃນພຣະຣາຊອານາຈັກລາວ. ສະພາບການ ຈຶ່ງໄດ້ປ່ຽນໄປແບບໜ້າຢ້ານກົວ ເພາະວຽດນາມເໜືອໄດ້ທອ້ນໂຮມກຳລັງອັນມະຫາສານ ຢູ່ພາກເໜືອ ຂອງລາວຄື: ແຂວງຜົ້ງສາລີ, ແຂວງຫົວພັນ, ແຂວງຊຽງຂວາງ, ແລະໃນພາຄ 3 ແລະ ພາຄ 4 ທິສ ໃຕ້ຂອງລາວ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 86</u>. ພຣະເຈົ້າມະຫາຊີວິດລາວ ສະເດັດໄປປະພາສພາຄ 2 ໃນປີ 1970 ຫລັງຈາກຍຶດໄດ້ທົ່ງໄຫຫີນ ຄັ້ງທີ່ສອງ ໄດ້ໄປສະຫລອງ ບຸນຈຽງ ປີໃໝ່ມົ້ງ ທີ່ທົ່ງໄຫຫີນ. ຫລັງຈາກນັ້ນ ກໍບໍ່ໄດ້ກັບໄປຮອດທົ່ງໄຫຫີນອີກ.*




<u>ຮູບທີ່ 87</u>. ຜູ້ບັນທຶກ ແລະ ນາຍທະຫານພາກສອງກຳລັງຕອ້ນຮັບສເດັດເຈົ້າຊາຍຂອງລາວໃນປີ 1973 ທີ່ລ່ອງແຈ້ງ. ພະອົງບໍ່ໄດ້ອອກຈາກປະເທສ ໄດ້ຖືກນຳໄປຂັງຄຸກ ຢູ່ສູນສັມມະນາ ດັດສ້າງຂອງ ສປປລໄດ້ເສັຍຊີວິດຄາຄຸກ. ລັທທິ ຄ.ມ.ນ. ແມ່ນລັທທິ ປາບ ຣາຊາ ຫລື ສັກດີນາ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 4.

# ການຈັດຕັ້ງຝ່າຍພົນລະ ເມືອງໃນເຂດທະຫານພາຄ 2

## ໂຮງຮຽນປະຖົມສຶກສາ

ຜູ້ກຳກັບກວດກາປະຖົມສຶກສາແຂວງຊຽງຂວາງເລີ່ມແມ່ນທ່ານວັນເຮືອງ ວົງສາວັນທອງ ຜູ້ຮອງແມ່ນເຈົ້າ ສາຍ ຕໍ່ໄປແມ່ນ ທ້າວຕູບູນມາຊານິນ ຜູ້ຮອງ ແມ່ນທ່ານນົວເລັ້ຍ. ເລີ່ມປີ 1967, ເປັນຕົ້ນມາແມ່ນທ່ານ ນົວເລັ້ຍ ເປັນຜູ້ກວດກາປະຖົມການສຶກສາ ຜູ້ຮອງແມ່ນທ່ານບຸດທະຣັງສີ ດວງສວັນ ເຖິງວັນທີ່ 14 ເດືອນ ພຶສພາ (May) 1975.

<u>ໝວດໂຮງຮຽນຕ່າງໆໃນແຂວງຊຽງຂວາງ ແລະ ທ່ານຄຣູ</u>

- ໝວດໂຮງຮຽນເມືອງຄຳ(ບ້ານບານ) — ແມ່ນທ່ານ ເພັ້ງເພັ່ງ ວິໄນຍາ.
- ໝວດໂຮງຮຽນເມືອງແປກ(ໂພນສວັນ) — ແມ່ນທ່ານບູນ ບູລົມຕໍ່ໃສ່ ຜຸຍ ຜົງສະຫວັດ.
- ໝວດໂຮງຮຽນເມືອງຄູນ(ຊຽງຂວາງ) — ແມ່ນທ່ານ ຄຳໄຊ໌ຍ ໜໍຣະສີງ.
- ເຄິ່ງ ໝວດໂຮງຮຽນເມືອງງານ — ແມ່ນທ່ານສົມທອງ ມັງໜໍເມັກ.
- ເຄິ່ງ ໝວດໂຮງຮຽນທ່າໂທມ — ແມ່ນທ່ານຈານ ພະໄຊຍະສິທ.
- ເຄິ່ງ ໝວດໂຮງຮຽນລາດຮວ້ງ — ແມ່ນທ່ານ ກີລາ ມູນິວົງສ໌.

ຫລັງຈາກມີການປ່ຽນແປງດ້ານການເມືອງໃນປີ 1961 ເປັນຕົ້ນມາ ສະຫາຣັຖໄດ້ຍື່ນມືເຂົ້າມາຊ່ວຍ ດ້ານ ການສຶກສາ ໄດ້ເຮັດໃຫ້ມີໂຮງຮຽນທຸກບ່ອນ ພາໃຫ້ຄົນມົ້ງ, ຄົນລາວ ພາຄ 2 ໄດ້ຮັບການສຶກສາ ດີພໍສົມ ຄວນ.

<u>ໝາຍເຫຕ:</u>

ທ່ານບຸດທະຣັງສີ ດວງສວັນ ຜູ້ຮອງກວດການປະຖົມສຶກສາແຂວງຊຽງຂວາງ ໄດ້ຊຽນວ່າ: "ການສຶກສາ ໄດ້ຊ່ວຍໃຫ້ປະຊາຊົນລາວ ຕື່ນຕົວ ຮູ້ແຈ້ງ ເຫັນຈິງ ຫລາຍຢ່າງ. ຫລາຍເຜົ່າໄດ້ມາໂຮມກັນ ຈຶ່ງພາໃຫ້ມີ ໂຮງຮຽນ ຢູ່ທຸກບ້ານ ນ້ອຍໃຫ່ຍ. ແຕ່ກ່ອນ ຜູ້ມີເງິນເທົ່ານັ້ນ ຈຶ່ງໄດ້ຮັບການສຶກສາສູງ. ປະຈຸບັນ ແມ່ນ ອິພະຍົບໄປໃສ ກໍສົ່ງຄຣູໄປສອນຮອດບ້ານນັ້ນ ດ້ວຍການຊ່ວຍເຫຼືອຈາກສະຫາຣັຖ ແລະການເອົາໃຈ ໃສ່ສນັບສນູນຂອງ ທ່ານນາຍພົລຕຣີ ວ່າງປາວ". (ທ່ານໄດ້ເສັຍຊີວິດຢູ່ລາວຕອນໄປຢັ້ງມຍາມເມືອງລາວ ໃນເດືອນພຶສຈິກາ (November), 2011).


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ນັບຕັ້ງແຕ່ ໃນປີ 1968 ທ່ານມົວເລັ້ຍ ແລະ ທ່ານບຸດທະຣັງສີ ດວງສວັນໄດ້ຂຍາຍການສຶກສາ ໄປຕາມໝວດໂຮງຮຽນຕ່າງໆດັ່ງນີ້ຄື:

- ທ່ານບຸດທະຣັງສີ (ທ່ານບຸດທະຣັງສີ ເປັນອິພະຍົບປະຈຸບັນຢູ່ຣັດເທຊສັກ, Texas) ເປັນຫົວໜ້າໝວດ ໂຮງຮຽນຜາຂາວຕໍ່ມາແມ່ນທ່ານຄຣູ ຈັນໂທ ປາກດີມູນີວົງ.
- ທ່ານຄຣູ ລໍ ລີ ແມ່ນຫົວໜ້າໝວດໂຮງຮຽນຊຳທອງ ຫລັງຈາກສັດຕຣູ ເຂົ້າໂຈມຕີຊຳທອງໃນປີ 1968 ກໍ ໄດ້ຍ້າຍໄປຢູ່ພັກແຄະ.
- ທ່ານຄຣູ ຢ່າງຢື້ງ ແມ່ນຫົວໜ້າໝວດໂຮງຮຽນລ່ອງແຈ້ງ ຕໍ່ມາແມ່ນ ທ່ານຄຣູຊົງກາວ, ເພາະທ່ານຢາງຢື້ງຖືກຍ້າຍໄປປະຈຳຢູ່ ບອມຫລົງ (LS32). ຫລັງຈາກຖືກສັດຕຣູໂຈມຕີ ທ່ານຄຣູຢາງຢື້ງໄດ້ຍ້າຍໄປໄສ່ໝວດໂຮງຮຽນລ່ອງແຈ້ງໃຕ້, ລ່ອງແຈ້ງກາງ, ໄດ້ຍ້າຍໄປພູສັນ ແລ້ວກັບມາລ່ອງແຈ້ງ ຈົນຮອດມື້ອົພະຍົບ (ຢ່າງຢື້ງເສັຍຊີວິດຢູ່ສະຫາຣັຖ ຣັດມິເນໂຊຕາ (Deceased in Minnesota, July 2007)
- ທ່ານຄຣູ ຊົງກາວ ຈາກບອມຫລົງ ກັບລ່ອງແຈ້ງ ແລ້ວໄປໝວດໂຮງຮຽນພູວຽງ (ອົພະຍົບຢູ່ຣັຖ Iowa)
- ທ່ານຄຣູ ລໍຕົວ ແມ່ນຫົວໜ້າໝວດໂຮງຮຽນບ້ານນາ ຜູ້ລອງແມ່ນທ່ານຄຣູຈານພະໄຊຍະສິດ. ຫລັງຈາກບ້ານນາໄດ້ຕົກໃຫ້ສັດຕຣູຄອມມຸຍນິສຕ໌ແລ້ວ ທ່ານຄຣູລໍຕົວ ໄດ້ຍ້າຍໄປໃສ່ໝວດໂຮງຮຽນ ນ້ຳຍອນ ແທນທ່ານຄຣູຈານພະໄຊຍະສິດ ທີ່ໄດ້ຍ້າຍໄປເປັນຫົວໜ້າເຄິ່ງໝວດໂຮງຮຽນບ້ານນ້ຳປູ່ນ ເມືອງເດຊາ *(ປະຈຸບັນທ່ານ ລໍຕົວ ຢູ່ ຣັດນອສໄຄໂຣໄລນາ, North Carolina) ເຮັດຟາມໄກ່).*
- ທ່ານຄຣູ ຢາງຢີ ເປັນຫົວໜ້າໝວດໂຮງຮຽນພູໂສ້, ພູສັນໃຫ່ຍ (ສອງໄລ) ແລ້ວຍ້າຍມາສອນຢູ່ໝວດໂຮງຮຽນປາກເມີຍ.
- ທ່ານຄຣູ ຢາງບີ ແມ່ນຫົວໜ້າໝວດໂຮງຮຽນ ນາຫລວງ.
- ທ່ານຄຣູ ຕູ້ມົວລີ ຢົງເນັ້ງເປັນຫົວໜ້າໝວດໂຮງຮຽນທົ່ງໝຽ້ງ. *(ມາເຖິງສະຫາຣັຖ ບໍ່ດົນໄດ້ເສັຍຊີວິດ.)*
- ທ່ານຄຣູ ແຫລມທອງເປັນຫົວໜ້າໝວດໂຮງຮຽນນ້ຳໂມ້.
- ທ່ານຄຣູ ຄຳຫລ້າ ຄຳພາວົງ ເປັນຫົວໜ້າໝວດໂຮງຮຽນເມືອງຈ້າ (ເມືອງເດຊາ)
- ທ່ານຄຣູ ຄຳໄບ ວົງທອງຈິດ ເປັນຫົວໜ້າໝວດໂຮງຮຽນພູສັນຫລວງ.
- ທ່ານຄຣູ ຄຳກ້ອນ ດວງເດດ, ຫົວໜ້າໝວດໂຮງຮຽນເມືອງສຸຍແລ້ວໄດ້ຍ້າຍໄປປະຈຳເຄິ່ງໝວດໄກ້ພັກແຄະ ພູເຕົ່າ
- ທ່ານຄຣູ ຄຳພິ ສີສະເກດ ເປັນຫົວໜ້າໝວດໂຮງຮຽນ ເມືອງ ອອມ.
- ທ່ານຄຣູ ຈານພາ ຈັນທະຣັງສີ ເປັນຫົວໜ້າໝວດໂຮງຮຽນ ຕລາດຂົວເຫລັກ ຫວ້ຍປາຈາກ.

ໃນ 1972 ມີ 400 ກວ່າໂຮງຮຽນ ມີຄຣູສອນຜູ້ຊາຍ ຈຳນວນ 161 ຄົນ ຄຣູສອນ ຜູ້ຍິງ 4 ຄົນ. ນັກຮຽນ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຜູ້ຊາຍ ມີ 4,788 ຄົນ ນັກຮຽນຜູ້ຍິງ ມີ 1,054 ຄົນ. ເບິ່ງຕາມຈຳນວນໂຮງຮຽນ ແລະ ຈຳນວນ ນັກຮຽນ ກໍ ຮູ້ວ່າຢູ່ແຂວງຊຽງຂວາງ ຍັງຂາດຄຣູຫລາຍທີ່ສຸດ. ຄຣູທີ່ມີຄວາມຮູ້ ທີ່ໄດ້ຈົບການຮຽນດ້ານວິຊາການສອນ ບໍ່ມີພຽງພໍ ເພາະເສີກເສືອຢູ່ທຸກຈອກທຸກແຈ ກັນດານ ຈຶ່ງບໍ່ມີຄຣູ ທີ່ຢາກໄປສອນ ຫລື ໄປປະຈຳຢູ່ພາຄ 2 ຈຶ່ງພາໃຫ້ຂາດຄຣູ.

## ມັທະຍົມຊຳທອງ

ເຣີ່ມຕົ້ນແມ່ນ ທ່ານອາຈານຄຳເຫລັກ, ຕໍ່ມາແມ່ນທ່ານອາຈານ ຕູ້ພື້ ໃນປີ 1969 ຊຳທອງຖືກໂຈມຕີຈາກ ສັດຕຣູ ມັທະຍົມຊຳທອງໄດ້ຍ້າຍໄປຕັ້ງຢູ່ຂ້າງໂຮງຮຽນມັທະຍົມຟ້າງູ່ມ ຢູ່ນະຄອນວຽງຈັນທນ໌ ທ່ານຕູ້ພື້ ຖືກຮັບໃຊ້ຝ່າຍທະຫາຣ, ຕໍ່ມາແມ່ນ ທ່ານເລີຊາສ ດານີວ (Lechard Daniel) ຄົນຝຣັ່ງເສສ ມາແທນ. ໃນປີ 1973 ໄດ້ຍ້າຍກັບໄປຕັ້ງຢູ່ເມືອງຈ້າ ຫລືເມືອງເດຊາ ແມ່ນທ່ານອາຈານ ລີຈາວ ຈົນເຖິງ ປີ 1975 ແລ້ວ ໄດ້ອົພະຍົບໄປຢູ່ ສະຫາຣັຖ ໄດ້ເສັຍຊີວິດໃນວັນທີ່ 3 ເດືອນຕຸລາຢູ່ (South Carolina, October 3, 2009).

ຫລັງຈາກສົງຄາມດຽມບຽນຟູ ສຖານະການໃນຣາຊອານາຈັກລາວໄດ້ປ່ຽນແປງໄປ ແຂວງຫົວພັນແລະ ຜົ້ງສາລີ ຕົກໄປຢູ່ໃນການຄວບຄູມຂອງ ລາວ ຄ.ມ.ນ. 100 ເປີເຊັນ ໄດ້ພາໃຫ້ປະຊາຊົນສ່ວນຫລາຍ ທີ່ບໍ່ ມັກລັທທິຄອມມຸຍນິສຕ໌ ຕ້ອງເຂົ້າປ່າຕໍ່ສູ້ ຫລືຈຳເປັນໄດ້ອົພະຍົບໄປຢູ່ແຂວງອື່ນ ໂດຽສະເພາະແມ່ນໃນ ຫົວເມືອງຕ່າງໆ ເພື່ອຄວາມປອດພັຍ ຈຶ່ງໄດ້ເຮັດໃຫ້ການປົກຄອງ, ການສຶກສາ ຫຍູ້ງຍາກ. ປະຊາຊົນ ຂາດການນຳພາ ແລະ ເກີດບັນຫາຫລາຍແນວ ສະລັບຊັບຊ້ອນຂື້ນ ບໍ່ປອດພັຍຢູ່ໃນລາວ ຍ້ອນມີການ ແຊກແຊງ ຂອງຄອມມຸຍນິສຕ໌ ຫລາຍຮູບແບບ ທີ່ບໍ່ເຄີຍມີ ແລະ ບໍ່ເຄີຍເຫັນມາແຕ່ກ່ອນ.

ຝຣັ່ງໄດ້ຖອຍອອກຈາກອິນດູຈີນ ໄດ້ນຳອົພະຍົບຈາກວຽດນາມເໜືອ ຫລາຍຮ້ອຍພັນຄົນໄປຢູ່ຫລາຍ ແຂວງໃນລາວ ຄື: ແຂວງຊຽງຂວາງ, ແຂວງວຽງຈັນທນ໌, ແຂວງສວັນນະເຂດ ແລະແຂວງໄຊຍະບຸຣີ. ຫລັງ ຈາກກອງແລ ເຮັດຣັຖປະຫາຣຂຶ້ນ ກໍເລີ່ມມີອົພະຍົບພາຍໃນປະເທສ ຫລັ່ງໄຫລເຂົ້າໄປຢູ່ຕາມເມືອງ ໃຫ່ຍໆ ເພາະຖືກໂຈມຕີ ຢູ່ຊົນນະບົດ, ຢູ່ແຂວງຕ່າງໆຄື: ແຂວງຫົວພັນ, ແຂວງຟົ້ງສາລີ ແລະພາຄໃຕ້ ຫລາຍແຂວງ ພາໃຫ້ການຈັດຕັ້ງສັບສົນ, ຂາດການຕິດຕາມທຸກຢ່າງ, ບໍ່ຮູ້ຈັກກັນດີ, ເຕົ້າໂຮມກັນບໍ່ໄດ້ ແລະ ບໍ່ເປັນກ້ອນ ເປັນກູ່ມ ເຖິງມີກໍນ້ອຍ. ຕົວຢ່າງ ແຂວງຫົວພັນ ຢູ່ພາຄ 2 ຊຶ່ງແມ່ນທ່ານຄຣູສົມ ວິຈິດ ວົງສາ ຕໍ່ມາ ກໍແມ່ນ ທ່ານຄຣູ ມູນຕີ ສົພາບມີໄຊຍ໌.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ຝ່າຍຕຳຣວຈ

ຜູ້ນຳແມ່ນ ພ.ຕ.ອ. ບູນທອງ ແສງຄຳຢອງ ຜູ້ລອງແມ່ນ ພ.ຕ.ຕ. ຢ່າງຈາວ(ໄດ້ເສັຍຊີວິດຢູ່ສະຫາຣັຖ ທີ່ຣັຖ ມິເນໂຊຕາໃນເດືອນທັນວາ December 11, 2011.) ຕຳຣວຈເຜົ່າລາວໄດ້ ເລີ່ມປະຕິບັດໜ້າທີ່ ມາແຕ່ສໄມ 1949 ຫລັງຈາກຝຣັ່ງເສສ ໄດ້ມອບເອກະຣາຊໃຫ້ ລາວຢູ່ໃນສະຫະ ພັນທ໌ຝຣັ່ງເສສ. ຕຳຣວຈແມ່ນໂອນມາຈາກຝ່າຍທະຫາຣ. ຫລັງຈາກນັ້ນ ກໍມີການຝຶກນາຍຕຳ ຣວຈ ແລະຕຳຣວຈ ທົ່ວ ພຣະຣາຊອານາຈັກລາວ ເລີ່ມແຕ່ 1950. ສຳຫລັບ ຕຳຣວຈຊາວເຜົ່າມົ້ງ ໄດ້ເລີ່ມ ຝຶກຕັ້ງແຕ່ປີ 1955 ດັ່ງຕໍ່ ໄປນີ້:

<u>ຕຳຣວຈລາວເຜົ່າມົ້ງໃນແຂວງຊຽງຂວາງ ແຕ່ລະຊຸດ:</u>

- ຊຸດທີ່ໜຶ່ງມີຄື: ທ່ານຮັ່ງຈື້, ທ່ານ ຢ່າງຈາວ, ທ່ານກືເຈັ້ຍ, ທ່ານວ່າງຕູ້ ແລະ ທ່ານ ຊີງຝື່ວ.
- ຊຸດທີ່ສອງ ມີຄື: ທ່ານ ຮັ່ງດົວ, ທ່ານ ຢາງຈາວ ນ້ອຍ, ທ່ານລໍຊ້າງ, ທ່ານ ມົວຈູ, ທ່ານມົວບີ, ທ່ານ ກື ເຈັ້ຍ, ທ່ານເຮີດົວ ແລະ ທ່ານເຮີ ຈື້.
- ຊຸດທີ່ສາມແມ່ນໂອນມາຈາກ ສາຣະວັດທະຫາຣ ມາເປັນຕຳຣວຈຄື: ວ່າງຕູ້, ວ່າງຊ້າງ, ຢາງຕົວ, ຈ້າກືຢາງ, ໄຟດາງ ທ່າວ, ລີລື, ແລະ ຢາງເຈີ.

ຫລັງຈາກນີ້ ກໍມີຫລາຍລູ້ນໄດ້ໄປຮຽນຢູ່ຊຽງຂວາງ, ຍ້ອນສຖານະການໄດ້ປ່ຽນແປງ ມາຈາກກອງແລ ປະຕິວັດ ຈຶ່ງໄດ້ໄປຮຽນຢູ່ແຂວງຕ່າງໆ ແລະໄປຮຽນມາຈາກ ນະຄອນວຽງຈັນທນ໌ ແຕ່ບໍ່ຮູ້ໝົດ.

ຕຳຣວຈທັງໝົດໃນ ແຂວງຊຽງຂວາງມີປະມານ 200 ຄົນ.

***ຊີວະປວັດຫຍໍ້ ຂອງ ພ.ຕ.ຕ. ຮັ່ງດົວ (ເຊີນອ່ານຢູ່ໜ້າຊີວະປະວັດຫຍໍ້)***

<u>ການຈັດຕັ້ງ ເຈົ້າແຂວງ, ເຈົ້າເມືອງ, ແລະ ຜູ້ແທນຣາຊດອນ ໃນເຂດພາຄ 2</u>

ກ່ອນປີ 1945 ລາວເຮົາບໍ່ມີເຈົ້າແຂວງ ເຖິງຈະມີ ກໍມີແຕ່ຜູ້ ຮອງ ເພາະລາວເປັນຫົວເມືອງຂື້ນຂອງຟຣັ່ງ ເສສ. ຂັ້ນເຈົ້າເມືອງ ບາງບ່ອນກໍຢູ່ພາຍໃຕ້ອຳນາຈຂອງຟຣັ່ງເສສ. ຫລັງຈາກປີ 1949, ຄົນລາວ ຈຶ່ງມີຜູ້ ວ່າຣາຊການແຂວງ ເພາະຝຣັ່ງເສສໄດ້ມອບເອກຣາຊໃຫ້ ຈຶ່ງໄດ້ຈັດຕັ້ງເຈົ້າແຂວງຂຶ້ນ ທົ່ວພຣະຣາຊອາ ນາຈັກລາວ ມີ 12 ແຂວງ ແຕ່ລະແຂວງ ມີ: ເຈົ້າແຂວງ, ເຈົ້າເມືອງ, ນາຍກອງ, ຕາແສງ, ນາຍບ້ານ, ນາຍເພັຍ, ຄນະ ຜູ້ ແທນຣາຊດອນ ແລະ ພະແນກ ການປົກຄອງຕ່າງໆຢູ່ໃນແຂວງ. ພາຄ 2 ມີ: ແຂວງ ຊຽງຂວາງ, ແຂວງຫົວພັນ (ຊຳເໜືອ) ຕັ້ງຂຶ້ນໃນ ປີ 1962.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ການຈັດຕັ້ງ ການປົກຄອງແຂວງ

<u>ແຂວງຊຽງຂວາງ</u>

ເຈົ້າແຂວງ ແມ່ນເຈົ້າສາຍຄຳ ສຸທະກະກຸມານ ຜູ້ ລອງເຈົ້າແຂວງ ມີສອງທ່ານຄື: ເຜົ່າມົ້ງ ແມ່ນທ່ານ ພຣະຍາ ຕູ້ບີ ລີຝຸງ ຕໍ່ມາ ແມ່ນທ່ານຢື້ວປາວ ຢາງ ແລ້ວໃນປີ 1975 ແມ່ນທ່ານ ມົວເຈັ້ຍ. ເຜົ່າລາວ ແມ່ນ ທ່ານທົງສວັດ ວົງສາວັນທອງ ຕອນຍ້າຍໄປເປັນເຈົ້າແຂວງ ຢູ່ປາກເຊ ແລ້ວກໍແມ່ນເຈົ້າຄົງ ແລ້ວ ແມ່ນ ທ່ານ ຄຳສິງ ແລ້ວໃນປີ 1975 ແມ່ນທ່ານບູນຈັນ ວຸທິສີສິມບັດ (ປະຈຸບັນ ທັງສອງຄົນ ທ່ານບູນຈັນ ແລະ ທ່ານມົວເຈັ້ຍ ໄດ້ອົບພະຍົບໄປຢູ່ປະເທສຝຣັ່ງເສສ). ຄະນະຜູ້ແທນຣາຊດອນ ມີຫລາຍທ່ານ ແລະ ຫລາຍ ຊຸດຜ່ານມາ ເຜົ່າລາວລຸ່ມບໍ່ຈຳໄດ້ ແຕ່ເຜົ່າມົ້ງ ຜູ້ທີ່ໜຶ່ງໃນປີ 1947 ແມ່ນ ທ່ານຕູ້ເລັ້ຍ ລີຝຸງ, ໃນປີ 1951 ແມ່ນ ທ່ານຕູ້ເຢີ ລີຝຸງ, ໃນປີ 1958 ແມ່ນທ່ານຕຸບີ ລີຝຸງ ແລ້ວຈຶ່ງແມ່ນຜູ້ແທນລູ້ນສຸດທ້າຍຄື: ທ່ານຕູ້ເຢັ້ງ ລີ ຜູ້ແທນຝ່າຍພີ່ນ້ອງ ມົ້ງ; ທ່ານບູນທັນ ຜູ້ແທນຝ່າຍພີ່ນ້ອງ ລາວເທີງ; ທ່ານເຈົ້າສອບໄຊຍ໌ ຊນະສຸທທະ ກະກຸມານ ຜູ້ແທນຝ່າຍພີ່ນ້ອງ ລາວລຸ່ມ.

<u>ພະແນກການປົກຄອງຕ່າງໆໃນແຂວງຊຽງຂວາງ</u>.

ສໄມກ່ອນປີ 1954 ແຂວງຊຽງຂວາງໄດ້ຈັດຕັ້ງເປັນ 5 ເມືອງ ຄື:

1. ເມືອງຄູນ ເຈົ້າເມືອງຕໍ່ໆກັນມາແມ່ນ ທ່ານວັນ ຕາໂນວັນ, ທ່ານໂຖມ ເນດຕະວົງ, ທ່ານ ດົວຄຳ ເພັງທີຣາຊ ເຖິງ 1961.
2. ເມືອງແປກ ເຈົ້າເມືອງເລີ່ມແມ່ນ ທ່ານບູນເພັງ ນໍຣະສິງ ເຖິງ 1961
3. ເມືອງຄຳ ເຈົ້າເມືອງແມ່ນທ່ານຄຳອວັນ ແລ້ວແມ່ນທ່ານບູນມີ ທິບພະວົງຄຳເຮືອງ (ພໍ່ຂອງ ພ.ອ ສີສະວັດ) ແລ້ວ ແມ່ນທ່ານຄຳໝັ້ນ ວໍຣະສານເປັນຄົນສຸດທ້າຍເຖິງ 1961
4. ເມືອງໝອກ (ທ່າໂທມ) ແມ່ນ ທ່ານອູຍ ຈັນທິວົງ.
5. ເມືອງມົ້ງ ເລີ່ມແມ່ນ ພຣະຍາຕູ້ບີລີຝຸງ ໃນປີ 1949 ແລ້ວແມ່ນທ່ານຢື້ວປາວຢາງ, ໃນປີ 1958 ທ່ານເຈັ່ຍ ຊ້າງມົວ. (ທ່ານຖືກຂ້າຕາຍໃນປີ1960 ຢູ່ທີ່ພັກແຄ້ໄກ້ໆໜອງແຮດ ຊຽງຂວາງ)

ຕອນພະຍາຕູ້ບີ ເລືອກ ຢື້ວປາວຢາງມາເປັນເຈົ້າເມືອງ ໃນປີ 1949 ນັ້ນ ສຖານະການໄດ້ ເຮັດໃຫ້ ທ່ານບີ ຈູ ລໍ ເກີດຄວາມບໍ່ພໍໃຈ ຈຶ່ງໄດ້ໂຕນໄປຮ່ວມມືກັບຄນະປະເທສລາວ, ຍ້ອນຄິດວ່າຕົນເອງ ມີຄວາມຮູ້ ຫລາຍກ່ວາ ທ່ານຢື້ວປາວຢ່າງ, ບໍ່ພໍໃຈກັບ ຕູ້ເລັ້ຍ ລີຝຸງ ທີ່ມີບັນຫາ ຂັດໃຈ ກັບຕົນເອງ ແລະ ບັນຫາພໍ່ ຂອງຕົນຖືກຈັບເຂົ້າຄຸກຢູ່ເມືອງຄຳ ບໍ່ມີຍາຕພີ່ນ້ອງຊ່ວຍ ພີ່ນ້ອງສ່ວນຫລາຍ ແມ່ນຢູ່ນຳຄນະປະເທສ ລາວ. ເຣື່ອງພໍ່ຂອງ ບີຈູ ຖືກຄຸກ ແມ່ນທ່ານເປັນຕາແສງ ໄດ້ກະທຳຜິດຖານເກັບພາສີ ນຳປະຊາຊົນບໍ່ຕາມ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຄຳສັ່ງ ຂອງທ່ານເຈົ້າເມືອງ. ປະຊາຊົນບໍ່ມີເງິນເສັຍພາສີ ພໍ່ຂອງບີຈູ ລໍ ເປັນຜູ້ອອກໃຫ້ກ່ອນ ແລ້ວຈຶ່ງເກັບເອົາຈາກປະຊາຊົນ ເຈົ້າເມືອງຖືວ່າມັນຜິດກົດໝາຍ ເຈົ້າເມືອງຈຶ່ງໄດ້ຈັບພໍ່ຂອງບີຈູເຂົ້າຄຸກຕາມ ກົດໝາຍ. ຍ້ອນສິ່ງເຫລົ່ານີ້ ບີຈູ ລໍ ຈຶ່ງຕັດສິນໃຈໜີໄປຫາແກວ ແລະແນວລາວ ໃນປີ 1949. ໃນຕອນສຸດທ້າຍ ກໍໄດ້ກັບມາຫາ ພຣະຍາ ຕູ້ບີ ລີຟຸງ ຕາມເຄີຍໃນປີ 1957 ເວລາ ລາວຮວມລາວ ສອງຝ່າຍ.

ໃນວັນທີ່ 31 ເດືອນທັນວາ (December) ປີ 1960 ທະຫານກອງແລ ເຂົ້າໄປຕີຊຽງຂວາງໄດ້. ທ່ານບີຈູ ລໍ ກໍໄດ້ໂຕນໄປເຂົ້າຮ່ວມຝ່າຍກາງ ໃນປີ 1961. ແຕ່ສຸດທ້າຍ ໃນປີ 1963 ກໍຖືກສັດຕຣູ ຄ.ມ.ນ. ຝ່າຍເປັນກາງຈັບໄປຂ້າຖິ້ມຢ່າງທາຣູນ ຢູ່ທົ່ງໄຫຫີນ ແຂວງຊຽງຂວາງ. ໃນປີ 1961 ກອງແລ ເຂົ້າຍຶດ ແຂວງຊຽງຂວາງພາໃຫ້ການປົກຄອງໄດ້ຍູ້ງຍາກ. ເພື່ອຄວາມສະດວດໃນການປົກຄອງ ທ່ານນາຍພົນຕຣີ ວ່າງ ປາວ ແລະ ທ່ານເຈົ້າແຂວງ ສາຍຄຳ ຈຶ່ງໄດ້ຕົກລົງສເນີ ປັ່ງນການປົກຄອງ ຢູ່ໃນແຂວງຊຽງຂວາງ ໃຫ້ມີ 10 ເມືອງ ດັ່ງຕໍ່ໄປນີ້:

1. ເມືອງໜອງແຮດ: ທ່ານລີ ເນັ່ງທົ້ງ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຊີ່ງຟົ່ວ
2. ເມືອງຄຳ: ໃນປີ 1960 ແມ່ນທ່ານບູນຈັນ ວຸທທິສີສົມບັດ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ທອງແທບ
3. ເມືອງປາງໄຊ໌ຍ: ທ່ານໂປນມູນ (Paul Moune) ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຄຳແສນ.
4. ເມືອງຫາງາດ: ທ່ານລີຊົງ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຄຳປຸ່ນ.
5. ເມືອງໝອກ (ທ່າໂທມ):ທ່ານ ຄຳສິງ ຕໍ່ມາແມ່ນທ່ານ ຄຳສອນ ຊະນະນິກອນ ຍາມສົງຄາມແມ່ນທ່ານອູ້ຍ ຈັນທິວົງ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນທ່ານ ພ.ຕ.ຕ. ສະນິງຄຳ ອະໄພຍະວົງສ໌.
6. ເມືອງຮູ່ງ: ທ່ານຊາວເຈັ້ຍ ທ່າວເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຮັງດົວ:
7. ເມືອງຄູນ: ທ່ານສະນິງຄຳ ອາໄພຍວົງສ໌ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຮັງຈີ້;
8. ເມືອງແປກ: ທ່ານຄຳຕັນ ທິພວົງສ໌ຄຳເຮືອງເປັນເຈົາເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຊຽງມູນຕີ
9. ເມືອງວຽງຟ້າ: ທ່ານມົວເຢີ ມົວໜູຕົວ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ເຮີດົວ
10. ເມືອງວຽງໄຊຍ: ທ່ານຢົ້ວຕົງ ຢາງ ເປັນເຈົ້າເມືອງ, ຝ່າຍຕຳຣວຈແມ່ນ ພ.ຕ.ຕ. ຢາງຈາວ ນ້ອຍ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

*ເຊີນອ່ານປະວັດຫຍໍ້ຂອງຍາລູງບູນຈັນ ວຸທິສີສົມບັດ ອະດີດເຈົ້າເມືອງໆຄໍາ ແລະລອງເຈົ້າແຂວງຊຽງຂວາງ ໃນໜ້າຊີວະປະວັດຕໍ່ໄປ.*

ເຣື່ອງເຫດການໃນຊີວິດແລະຄວາມຄິດຄວາມເຫັນຂອງຍາຫລວງບູນຈັນ ວຸດທິສີສົມບັດ (ເທົ່າທີ່ຈໍາໄດ້).

ໃນວັນທີ່ 9, ມີນາ (March) 1945 ຍີປູ່ນໄດ້ເຂົ້າໄປໃນເຂດຊຽງຂວາງ ເຈົ້າໜ້າທີ່ຝຣັ່ງເສສໄດ້ຖືກ ຈັບຫລາຍຄົນ ໂຮງຮຽນຕົວເມືອງຊຽງຂວາງ ໄດ້ປິດລົງໝົດ. ໃນລະຍະນັ້ນຮຽນໜັງສືຢູ່ນໍາກັນເທົ່າ ທີ່ຈື່ ໄດ້ ມີລີຕູ້ ລີຟຸງ ນ້ອງຊາຍຂອງພະຍາຕູ້ບີ ລີຟຸງ ຜູ້ໄປເປັນຫົວໜ້າໂຍທາ ຢູ່ສວັນນະເຂດ, ທ້າວຄໍາເຜີຍ ຄົນຊຽງແດດ ເປັນຫົວໜ້າໂຍທາຢູ່ປາກເຊ ແລະທ່ານໝໍ ຄໍາເມິງ ຕຸນາລົມ.

ມື້ໜຶ່ງຫລັງຈາກໂຮງຮຽນແລ້ວ ອ້າຍ ແລະ ໝູ່ຜູ້ນຶ່ງ ຊື່ວ່າ ທ້າວສູຕາ (ຄົນບ້ານນາອູ່ ຕາແສງຊຽງ ຢູ່ໄກ້ຊຽງຂວາງ 5 ກິໂລແມຕຣ໌ ) ໄດ້ເດີນທາງໄປລາດຣວັງ ອ້າຍ ແລະ ສູຕາ ໄດ້ຍ່າງອອກຈາກຊຽງຂວາງ 8ໂມງເຊົ້າ ມາທາງເມືອງພານແລ້ວ ກໍໄປຕາມທາງ ບ້ານມົ້ງ ທີບໃດບໍ່ຈື່ ພາກັນຫລົງທາງວ່າຈະໄປເມືອງຄະ ແຕ່ພໍຍ່າງ ໄປ 5 ກີໂລແມຕຣ໌ ແລ້ວກັບຄືນມາທາງເກົ່າ ຈົນຈະຄໍ່າມືດແລ້ວ ຈຶ່ງໄດ້ກັບຄືນໄປເຖິງເມືອງຄະຮອດພູ້ນເວລາ 9 ໂມງກາງຄືນ. ຕື່ນເຊົ້າມື້ໃໝ່ຈຶ່ງຍ່າງອອກຈາກເມືອງຄະໄປຫາທາງໃຫຍ່ ລະຫວ່າງ ນໍ້າຮອ້ຍໝູໄປຫາບວກກົບ ເວລາຮອດທາງຣົຖແລ້ວເຫັນຣົຖທະຫາຣຝຣັ່ງເສສ ແລ່ນຣົຖ ຢູ່ລະຫວ່າງທາງເຫັນທະຫາຣຝຣັ່ງເສສ ຢືນຢູ່ເທິງຣົຖຈັບປືນຄົບມືເປັນຕາຢ້ານແທ້ໆ ເພາະຍິປູ່ນຍັງບໍ່ທັນມາເອົາຂັງໄຂ ຄ້າຍຝຣັ່ງເສສໄດ້ເທື່ອ ແລ້ວກໍຍ່າງຕາມທາງຈົນໄປເຖິງບ້ານໜຶ່ງ ຊື່ບ້ານຈອມທອງ ແລ້ວຈຶ່ງໄປຫາບ້ານຕອງໄກ້ໆເມືອງຄໍາ ເວລາ ນັ້ນຍີປູ່ນຍັງບໍ່ທັນມາຮອດເມືອງຄໍາ.

ເມື່ອທະຫາຣຍີປູ່ນເຂົ້າມາຮອດເມືອງຄໍາແລ້ວ, ໄດ້ມີ ໜຶ່ງກອງພັນປະມານ 300 ຄົນມາຕັ້ງຊົ່ວຄາວ ຢູ່ບ້ານຕອງ ປະມານ 15 ຫາ 20 ຄົນ ໄດ້ມາພັກເຊົາຢູ່ບ້ານລູງ, ກອງພັນທະຫາຣ ຍີປູ່ນ ນີ້ໄດ້ ມາພັກເຊົາຢູ່ບ້ານຕອງ ເພື່ອສ້າງທາງຣົຖໄປສູ່ແຂວງຫົວພັນ ເຂົາຍາຍກັນເອົານັກໂທສ ທີ່ມີທະຫາຣ ຝຣັ່ງເສສ ແລະພວກມອ້ຍກວາງຕູມເມືອງແກວ ມາຂຸດທາງ ເຂົາຢາຍກັນຂຸດທາງຣົຖ ແຕ່ບ້ານບານ ໄປ ເຖິງສິບເລົ້າ (ນໍ້າເນີນ) ແຕ່ສິບເລົ້າມາເຖິງບ້ານບານ. ການເຮັດວຽກຂຸດດິນ ຟັນໄມ້ເຮັດທາງ ເຂົາເຮັດ ນໍາກັນໝົດທຸກຄົນ ບໍ່ມີແຫລ້ງມີນາຍ ນັບແຕ່ນາຍຮ້ອຍທະຫາຣ ເຂົາກໍເຮັດວຽກຄືກັນ. ມີຣະບຽບ ວິໄນຢ່າງດີ ຢູ່ກິນນໍາກັນ ບໍ່ມີການລົບຫລູ່ກຸກວນຊາວບ້ານ ບໍ່ລົບກວນຜູ້ຍ່າຜູ້ຍິງ ເຄັ່ງຄັດຕໍ່ລະບຽບ ວິໄນແທ້. ຖ້າທະຫາຣຜູ້ໃດເຮັດຜິດຕໍ່ລະບຽບ ວິໄນຕ້ອງມີການລົງໂທດ ຄື: ມາຢືນກົ້ງ ຢູ່ຕໍ່ໜ້ານາຽ ແລ້ວກໍຖືກທູບຕີຕົນຕົວ ແລະ ໜ້າຕາຈົນລົ້ມ ຕ້ອງກັບມາຢືນຂື້ນ ໃຫ້ນາຍຕີຈົນສົມກັບໂທສ ທີ່ໄດ້ ທໍາຜິດ. ທະຫາຣກອງພັນນີ້ ໄດ້ມາພັກເຊົາໄດ້ປະມານ ສາມເດືອນຈົນຮອດ ມື້ຍີປູ່ນປຣາໄຊຍ໌ ສົງຄາມໃນປີ 1945, ຍ້ອນປະເທສເຂົາເຈົ້າຖືກ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ລະເບີດປຣາມານູ ຂອງສະຫະຣັຖ. ຍີປຸ່ນໄດ້ເລີກສົງຄາມແລ້ວ ຕ່າວ ໄປທາງເມືອງແກວ. ໄດ້ມີທະຫາຣ ຍີປຸ່ນ 7 ກອງພັນ ຖອຍລົງມາຈາກແຂວງຫົວພັນ ເພື່ອລົງ ໄປວຽດນາມ ແລ້ວກໍຕໍ່ໄປປະເທສຍີປຸ່ນ. 7ກອງ ພັນນີ້ ຜ່ານມາ ມື້ລະກອງພັນໄດ້ມາເຊົາຢູ່ບ້ານຕອງ ຄືນລະມື້ ຮວມ ທັງໝົດ 7 ມື້ ທີ່ມີຍີປຸ່ນໄດ້ມາພັກເຊົາ ຢູ່ບ້ານລູງ ເທື່ອລະ 20 ປາຍຄົນແລະ ກໍມີລະບຽບວິໄນ ດີ ຄືກັນໝົດທຸກໆກອງ ພັນ.




*<u>ຮູບທີ່ 88</u>. ຄນະເຈົ້າເມືອງແຂວງຊຽງຂວາງໃນປີ 1972 . ຄນະເຈົ້າເມືອງ 10 ເມືອງຂອງແຂວງຊຽງຂວາງ ຮູບ ວັນທີ່ 30 ເດືອນ ກັນຍາ (September) 1972 ລາຍຊື່ ຈາກຊ້າຍຫາຂວາ : ທ່ານສະມົງຄຳ ອາໄພຍວົງສ໌, ທ່ານອຸ້ຍ ຈັນທິວົງ, ທ່ານມົວເຢີ ມົວໜູຕົວ, ທ່ານຍາງດາວ, ທ່ານ ບູນຈັນ ວຸທທິ ສີສົມບັດ, ທ່ານດົວຄຳ, ທ່ານໂພມູນ. ຜູ້ຢືນດ້ານຫລັງຈາກຊ້າຍຫາຂວາ: ທ່ານຊາວເຈັ້ຍທາວ, ທ່ານເນັ່ງທົ້ງ ລີ, ທ່ານຢົ້ວຕົງ ຢາງ ແລະ ທ່ານ ລີ ຊົງ.*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 89</u>. ຍາຫລວງ ບູນຈັນ ວຸຈທິສີສິມບັດ ຜູ້ລອງເຈົ້າແຂວງຊຽງຂວາງ ແລະ ພັລຍາ ຮູບຖ່າຍ ປີ 1997 ຢູ່ຝຣັ່ງເສສ*

ໃນປີ 1946, ໄດ້ສ້າງເມືອງໂພສວັນ ລູງໄດ້ໄປປະຈຳການຢູ່ບ້ານຫວ້ຍຄຳ (ບ້ານແກວ) ບ້ານນີ້ຢູ່ລະຫວ່າງກາງ ຂັງໄຂ ແລະໂພນສວັນ ທ່ານເຈົ້າເມືອງ ໆ ແປກແມ່ນ ທ້າວຄຳແພງ ທອງຄຳ ຕໍ່ໄປແມ່ນ ທ້າວວັນຕາໂນວັນ ແມ່ນທ່ານໄດ້ພາຂ້າຣາຊການ, ຊາວບ້ານ ໄປສ້າງຖາງປ່າບ້ານເຮືອ ຕາແສງກັດ ເປັນເມືອງໂພນສວັນປະຈຸບັນ. ເມື່ອສ້າງເມືອງໂພນສວັນຮຽບຮ້ອຍແລ້ວ ຈຶ່ງຍ້າຍຈາກບ້ານຫວ້ຍຄຳໄປໃສໂພນສວັນ. ກ່ອນຈະໄດ້ຊື່ວ່າເມືອງໂພນສວັນ ທ່ານເຈົ້າເມືອງ ທ້າວວັນ ຕາໂນວັນ. (ທ່ານໄດ້ ພາຄອບຄົວອົພະຍົບມາຢູ່ ສະຫະຣັຖ ທີ່ປອສແລນ ຣັຖ ອໍຣີກັນ Portland, Oregon, U.S.A. ຄົນລູ້ນນີ້ແມ່ນ ເຫລືອນ້ອຍຄົນ ເພິ່ນແມ່ນຜູ້ມີບູນວາດສນາແທ້). ໄດ້ສເນີຊື່ໃສ່ເມືອງນີ້ ຫລາຍຊື່ໃຫ້ທ່ານເຈົ້າແຂວງສາຍຄຳ. ທ່ານເຈົ້າແຂວງ ຈຶ່ງຂຽນໜັງສືຕອບທາງຣາຊການວ່າ *"ເຈົ້າແມ່ນທ້າວວັນ ເມືອງທີ່ເຈົ້າສ້າງຂຶ້ນ ໃຫ້ໃສ່ຊື່ວ່າ ເມືອງໂພນສວັນ"* ຕັ້ງແຕ່ປີ 1946 ມາຈຶ່ງເປັນເມືອງໂພນສວັນ.

## ການພົວພັນກັບສົງຄາມອິນດູຈີນຂອງຍາຫລວງບູນຈັນ

ໃນວັນທີ່ 12 ເດືອນເມສາ (April) ປີ 1953, ວຽດມິນໄດ້ສົ່ງທະຫານ ສີ່ກອງພົລ ເຂົ້າມາໂຈມຕີເມືອງລາວຄັ້ງທີ່ສອງ ຄື: ກອງພົນ 312 ເຂົ້າມາລຸກລານໂຈມຕີທະຫານຝຣັ່ງເສສຢູ່ເຂດຊຳເໜືອ ຫາຫລວງພະບາງ; ກອງພົລ 304 ແລະ 306 ຕີເຂົ້າຊຽງຂວາງເພື່ອທຳລາຍເດີນຍົນທົ່ງໄຫຫີນ ແລະ 308 ໂຈມຕີພາຄໃຕ້ຂອງລາວ. ພາໃຫ້ຄ້າຍແຂວງຫົວພັນເສັຍໜັກ ທະຫານ ພາກເໜືອຕ້ອງໜີເຂົ້າປ່າເພື່ອຫາທາງເຂົ້າມາທົ່ງ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄຫຫີນ ເພາະກອງບັນຊາທະຫານຝຣັ່ງເສສໃນອິນດູຈີນໄດ້ມາສ້າງປ້ອມຕໍ່ສູ້ຢູ່ທົ່ງໄຫຫີນຢ່າງແໜ້ນໜາ ເພື່ອປ້ອງກັນການລຸກລານຂອງວຽດມິນ, ບໍ່ດົນຕໍ່ມາມີກອງທະຫານຝຣັ່ງເສສ ປະກອບດ້ວຍ ຫລາຍໆ ຊາຕມາຊ່ວຍສະຫະພັນອິນດູຈີນຄື: ພວກອາຣາບ, ພວກ ມາໂຣກ, ພວກອັງເຢຣີ, ແລະ ທະຫານ ວຽດ ນາມໃຕ້. ເມື່ອກອງທັພວຽດມິນມາ ເຖິງໄດ້ເຂົ້າໂຈມຕີ ແຕ່ເຂົ້າບໍ່ໄດ້ ເພາະເປັນຄັງແປນຫລາຍ ກາງຄືນກໍ ມີເຄື່ອງບິນຖິ້ມຈອ້ງໄຟ ຕລອດແຈ້ງ ວຽດມິນຈະເຂົ້າມາທາງໃດກໍເຫັນໝົດ. ວຽດມິນເຂົ້າມາບໍ່ດົນ ກໍໄດ້ ຖອຍໜີໄປຕາມທາງ ເລຂທີ່ 4 ໄປຫາຊຽງຂວາງ ແລະຕາມປ່າພູ ກອງທະຫານຝຣັ່ງເສສ ກໍໄລ່ຕິດຕາມ ໄປທາງດົງດ່ານ ຫລາຍມື້ຈຶ່ງໄລ່ໄປເຖິງ ຊຽງຂວາງ. ກອງທະຫານວຽດມິນໄດ້ຢູ່ດົງດ່ານໄປຫາຊຽງຂວາງ ບໍ່ເຖິງເດືອນ ກໍຖືກຕີໄລ່ອອກໄປ. ວຽດມິນຖອຍໄປຕາມເຊັ້ນທາງ ຊັນນ້ອຍແທ່ນພູນ.

ໃນປີ 1953, ເວລາຕີເຂົ້າຊຽງຂວາງໄດ້ແລ້ວ ລູງໄດ້ໄປຢູ່ຊຽງຂວາງສິບມື້ ຫລັງຈາກນັ້ນກໍໄດ້ກັບຄືນມາ ຢູ່ທົ່ງໄຫຫີນຢູ່ນຳກອງພັນທະຫານວຽດນາມໃຕ້ ກອງພັນໂດດຈອ້ງຣາໂນຍ. ຢູ່ທົ່ງໄຫຫີນ ສິບກວ່າວັນ ກໍ ໄດ້ຖືກຍ້າຍໄປປະຈຳການຢູ່ນຳກອງທັພທະຫານຝຣັ່ງເສສ (Legion Etrangere) ກອງກຳລັງປະກອບ ຊາວຕ່າງດ້າວຂອງຝຣັ່ງເສສ ຜ.ບ. ແມ່ນຮ້ອຍເອກມາສແບຼນ (Capt. Max Blin) ແລ້ວ ກໍຍົກກອງທັພ ອອກຈາກທົ່ງໄຫຫີນ ຍ່າງຕີນໄປມື້ທີ່ໜຶ່ງ ອອກຈາກທົ່ງໄຫຫີນໄປນອນຢູ່ບ້ານຄັງມອນ ມື້ທີ່ສອງຈຶ່ງໄດ້ ຍ່າງໄປຕາມຖນົນ ເລຂທີ່ 7 ເມື່ອລົງມາ ກາຍຕາດເປີບ ມີທາງບ່ອນໜຶ່ງຮອມກວ່າໝູ່ ເປັນພູຊັນ ແມ່ນ ທາງເຂົ້າບ້ານແດນດິນ ໄກຈາກບ້ານບານປະມານ 11 ກິໂລແມຕຣ໌. ກອງທະຫານແກວໄດ້ມາລັດທາງ ຍິງຢູ່ບ່ອນຮອມໆນັ້ນ ໄດ້ໃຊ້ເວລາສູ້ຣົບກັນປະມານ 1 ຊົ່ວໂມງ ວຽດມິນກໍຖອຍໜີລົງໄປບ້ານບານ. ການ ເຂົ້າໂຈມຕີບ້ານບານເມືອງຄຳ ຄັ້ງນີ້ໄດ້ໃຊ້ແຜນດັ່ງຕໍ່ໄປນີ້:

- ກອງພັນໜຶ່ງ ຕີເຂົ້າທາງເມືອງຄະ ອອກໄປທາງເມືອງແຫ້ ແລ້ວເຂົ້າບ້ານບານ ທາງທິດໃຕ້;
- ກອງພັນໜຶ່ງ ຕີເຂົ້າທາງເໜືອໄປທາງນ້ຳສາຍ ແລ້ວລົງມາໃສ່ທົ່ງບ້ານບານ;
- ກອງພັນໜຶ່ງ ຕີເຂົ້າກາງ ແມ່ນກອງພັນປະສົມຊາວຕາງດ້າວຂອງຝຣັ່ງ ທີ່ລູງປະຈຳຢູ່ນຳຮ້ອຍເອກ ມາສແບຼນ (Capt. Max Blin) ລົງມາຕາມທາງຖນົນເລຂທີ່ 7.

ການເດີນທັພເຂົ້າໄປເທື່ອນີ້ ໄດ້ມີຍົນຕ໌ຄູ້ມກັນ ແມ່ນເຮືອບິນນ້ອຍ ມີຊື່ວ່າມໍຣານ (Moral) ບິນຕິດຕາມ ເບິ່ງກອງທະຫານຝ່າຍເຮົາທຸກເວລາ. ເມື່ອມີການຕໍ່ສູ້ກັນແລ້ວ ກໍມີເຮືອບິນຖິ້ມລະເບີດ ຊື່ເຮືອບິນ ບີ 4 ຫລື ຕີ 4 (B-4 and T-4) ຍົນຕ໌ໝາກປີນດຽວ ສີດຳນ້ອຍ ບິນໄວ ຖິ້ມລະເບີດ ແລະຍິງປືນໃສ່ສັດຕຣູ ບາງເທື່ອ ກໍມີເບ (B-26 )ໄປຊ່ວຍ ຂຶ້ນໄປເທື່ອລະ 4 ລຳ ຈົນກວ່າຍຶດເອົາໄດ້ບ້ານບານ ໄດ້ກຳນົດເວລາ ປະມານ 50 ມື້. ກ່ອນເຂົ້າເມືອງຄຳ ແມ່ນເດືອນພຶດສະພາ (May)1953, ລູງໄດ້ລົມນຳຮ້ອຍເອກ ມາສ ແບຼນ (Capt. Max Blin) ຜ. ບ. ກອງພັນ ກ່ອນຈະຮອດ ຕາດເປີບວ່າ: “ບ້ານເມືອງຊາວບ້ານບານເຮົາ ບໍ່ມີຄອບຄົວແກວ ຢູ່ນຳ ແລະກໍບໍ່ຄ່ອຍນິຍົມແກວ”. ໄດ້ລົມກັນເຣື່ອງນີ້ ແລະເຣື່ອງອື່ນນຳ ຈຶ່ງເຮັດໃຫ້ ທ່ານຮ້ອຍເອກ ມາສແບຼນ ໄດ້ເອົາວິທະຍຸ ໂທໄປຫານາຍທະຫານ ທຸກກອງພັນ ພ້ອມທັງເອົາໄມໂຄຼໂຟນ




All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

(Microphone) ຮອ້ງໃສ່ນາຍກອງຮ້ອຍທຸກຄົນໃຫ້ສັ່ງທະຫານດັ່ງຕໍ່ໄປນີ້: *"ກ່ອນຈະເຂົ້າບ້ານ ເມືອງນີ້ ໃຫ້ທ່ານສັ່ງລູກນ້ອງ ທະຫານໃຫ້ດີ ຢ່າໄດ້ເຂົ້າບ້ານເຂົ້າເຮືອນປະຊາຊົນ ແລະຢ່າໄດ້ເອົາເຂົ້າຂອງ ແມ້ແຕ່ໝາກໄມ້ໜ່ວຍ ໜຶ່ງຂອງປະຊາຊົນ ເພາະເຈົ້າຂອງບ້ານເມືອງ ເພິ່ນໄດ້ມານຳພວກເຮົາຢູ່ນີ້."*

ນັບແຕ່ 1953 ຫາ 1954 ກອງພັນທະຫານຝຣັ່ງເສສຢູ່ເມືອງຄຳ ເພິ່ນມີລະບຽບວິໄນດີ ບໍ່ໄດ້ແຕະຕ້ອງນິໄສໃຈຄໍຂອງປະຊາຊົນ ບໍ່ມີປະຊາຊົນຄົນໃດຕ້ອງຕີ ມີຄວາມຮັກແພງກັນດີທີ່ສຸດ ກອງພັນທະຫານ ຝຣັ່ງນີ້ ແມ່ນກອງພັນປະສົມຫລາຍຊາດຢູ່ ຢູໂຣບ (Europe) ນຳກັນຄື: ອີຕາລີ, ເຢຣະມັນ, ອັງເຢຣີ ແລະ ມາໂຣກ. ພວກທະຫານນີ້ ບໍ່ມີສິດໄດ້ຊັ້ນເກີນນາຍຈາເອກ (Adjudant-Chef) ສ່ວນຜູ້ບັງຄັບບັນຊານັ້ນແມ່ນແຕ່ຝຣັ່ງເສສໝົດ ເພາະສ່ວນຫລາຍແມ່ນ ທະຫານລັບຈ້າງມາ ຕໍ່ສູ້ສົງຄາມ.

ຫລັງຈາກຍຶດບ້ານບານໄດ້ແລ້ວ ທະຫານຝຣັ່ງເສສຫລາຍກອງ ກໍໄດ້ກັບທົ່ງໄຫຫີນ ປະໄວ້ແຕ່ກອງ ພັນປະສົມຕ່າງດ້າວຝຣັ່ງເສສ ປະຈຳຢູ່ບ້ານບານ ສ້າງປ້ອມຄ້າຍຢູ່ສາມພູ ໄດ້ກວດລ້າງພວກວຽດມິນ ຈົນໄປຮອດພັກແຄະ. ກອງພັນນີ້ຢູ່ບ້ານບານ ໜຶ່ງປີ ຈຶ່ງມີກອງພັນທີ່ 6 ຂອງກອງທັພລາວ ໄປປ່ຽນ ຜ.ບ. ແມ່ນພັນຕຣີ ບູນເລີດ ສານິຈັນ. ກອງພັນປະສົມຕ່າງດ້າວຝຣັ່ງເສສ ໄດ້ກັບທົ່ງໄຫຫີນ ເພື່ອຕຽມເຂົ້າໄປຊ່ວຍດຽນບຽນຟູ ໄດ້ເດີນທາງໄປ ແຕ່ໄປບໍ່ທັນຮອດ ດຽນບຽນຟູ ໄດ້ເສັຍກ່ອນ.

ກ່ອນວຽດມິນເຂົ້າໄປຕີທົ່ງໄຫຫີນໃນປີ 1953 ລູງຖືກເກັນເປັນທະຫານ ແລ້ວໄດ້ລົງໄປຮອດວຽງຈັນທນ໌ຍ້ອນເພິ່ນວ່າໃຫ້ລົງໄປຮຽນຢູ່ໂຮງຮຽນນາຍທະຫານຢູ່ປາກເຊ ແຕ່ບາງເອີນ ບໍ່ໄດ້ໄປ ໄດ້ຖືກສົ່ງກັບມາປະຈຳການນຳກອງທະຫານຢູ່ທົ່ງໄຫຫີນ ເພື່ອເປັນລ່າມໄປຊ່ວຍກອງທະຫານ ປະກອບຕ່າງດ້າວ ຝຣັ່ງເສສ ຢູ່ທົ່ງໄຫຫີນ. ເວລານັ້ນໄດ້ຂຶ້ນມານຳກັນ 5 ຄົນມີຄື: ທ່ານສາດຕະສິນ ຜົວນາງມໍຊົວ, ພ.ອ. ບູນນ້ອຍ ນ້ອຍມະນີ, ນາຍຄຣູ ກົງສະເດັນ ລຸກເຂີຍທ່ານຄຣູລຸຍ ແລຊກຸຍເຣ (Louis Lescure) ຢູ່ຊຽງຂວາງ; ອີກຜູ້ໜຶ່ງນັ້ນ ບໍ່ຈື່ຊື່ ແລ້ວ. ລູງໄດ້ເຮັດວຽກນຳກອງພັນປະສົມຊາວຕ່າງດ້າວຝຣັ່ງເສສ ຢູ່ເມືອງຄຳໜຶ່ງປີ ຈຶ່ງແຕກເມືອງຄຳ. ເວລາແຕກອອກຈາກເມືອງຄຳ ໄດ້ພາທາງກອງພັນທະຫານຝຣັ່ງ ຜ.ບ. ແມ່ນຣ.ອ. ຣີບວກ (Capt. Rebour) ແລະ ທ່ານໂຣເລນ ແຊນ (Roland Selbe) ຊຶ່ງແມ່ນນ້ອງເຂີຍທຸແຂວງເຈົ້າສາຍຄຳ ຜົວເຈົ້າແພງດີ ໄດ້ຂຶ້ນພູສັນ ແລ້ວມານອນບ້ານມົ້ງ ບ້ານຫາຳເຄົ້ ໄກ້ໆບ້ານບວມຫລົງ ແມ່ນບ້ານຍາພໍ່ເຈີປາວມົວ ແລ້ວມື້ຕໍ່ໄປ ຈຶ່ງລົງໄປບ້ານນາລາມ ແລະ ຍ່າງຕໍ່ໄປຈົນເຖິງທົ່ງໄຫຫີນ.

ໃນປີ 1953 ລູງໄດ້ພາຄອບຄົວລູກເມັຍໄປລີ້ໄພຍຢູ່ຮ່າໂນຍ ໄປພ້ອມຄອບຄົວພຣະຍາຕຸບີ ລີຟຸງ. ທ່ານຣ.ອ. ມາສແບູໄດ້ບອກລູງກ່ອນວ່າ: "ວຽດມິນຈະມາຕີທົ່ງໄຫຫີນໃນ 1953. ທະຫານວຽດມິນຈະເຂົ້າມາຕີທຸກເສັ້ນທາງຍຸທະສາຕ ແລະທຸກເດີນເຮືອບິນ". ເພິ່ນວ່າໃຫ້ເອົາລູກເມັຍໄປລີ້ຊົ່ວລະຍະໜຶ່ງກໍດີ. ເມື່ອເວລາໄປຢູ່ຮ່າໂນຍ ມື້ຈະກັບຄືນມາທົ່ງໄຫຫີນ ທະຫານວຽດມິນກໍໄດ້ໂຈມຕີເດີນຍົນຕ໌ຮ່າໂນຍ. ເຫັນຣິຖ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຖັງ ຝຣັ່ງເສສແລ່ນອອັ້ມເດີນຍິນຕ໌ຮ່າໂນຍ. ເມື່ອກັບມາແຕ່ຮ່າໂນຍແລ້ວ ໄດ້ໄປປະຕິບັດງານນຳຝຣັ່ງ ຈີນ ກັບໄປຕີບ້ານບານໄດ້ ແລ້ວປະຈຳຢູ່ບ້ານບານບໍ່ດົນ ກໍມີທະຫາຣວຽດມິນມາແຕ່ຖ້ຳລາ ມາຕີຄ້າຍທະຫາຣ ຢູ່ບ້ານບານ ແຕ່ເຂົ້າມາຍັງບໍ່ທັນເຖິງຄ້າຍ ມາທາງບ້ານຈໍ້ ບ້ານຊຽງຄູນ ຈະມາລັດທາງຢູ່ຕາດເປີບ ແຕ່ຖືກ ທະຫາຣຝ່າຍມິຕ ກອງພັນ 6 ລັດທາງ ຍິງຕາຍຫລາຍຄົນ ຢູ່ຕາດເປີບແລະບ້ານຊຽງຄູນ ແລ້ວວຽດມິນກໍ ຖອຍກັບຄືນໄປທາງຖ້ຳລາ. ເວລາວຽດມິນເຂົ້າມາຕີນີ້ ກອງພັນທີ່ສອງ ປະສົມຊາວຕ່າງດ້າວຝ່າຍຝຣັ່ງ ເສສ ໄດ້ຍ້າຍອອກຈາກບ້ານບານໄປໝົດ ແມ່ນກອງທະຫາຣລາວ ກອງພັນທີ່ 6 ຂອງລາວ ຮັກສາເມືອງ ຄຳໄວ້.

ໃນປີ 1955, ລູງໄດ້ໄປເມືອງໄທ໌ຍ ບາງກອກ ບັງເອີນໄປພົບຄນະຜູ້ແທນ ແມ່ນທ່ານອູ່ນ ຊນະນິກອນ ທີ່ ໄດ້ພາຄນະນາຍບ້ານ, ຕາແສງ, ພ້ອມຄົນມົ້ງຫລາຍສິບຄົນແຂວງຊຽງຂວາງ ເພື່ອໄປທັສນະສຶກສາເບິ່ງ ການສ້າງສາ ປະເທສໄທຍ໌ຫລາຍບ່ອນ. ຢູ່ບາງກອກ ໄດ້ໄປເບິ່ງເຖິງເມືອງອາຍຸທະຍາ, ເມືອງລົບບູຣີ. ຕອນຢູ່ລົບບູຣີ ມີຊາວເມືອງນັ້ນມາເລົ່າສູ່ຟັງວ່າ ຄົນແຂວງລົບບູຣີ ອຳເພີບ້ານໝີ ແມ່ນໄທພວນ ສ່ວນ ຫລາຍ ເວົ້າເປັນສຽງສຳນຽງຂອງຄົນລາວແຂວງຊຽງຂວາງ ເຂົາໄດ້ມາຢູ່ນີ້ຕັ້ງແຕ່ຫລາຍສໄມຜ່ານ ມາ. ເມື່ອກັບມາເຖິງບາງກອກ ທ່ານນາຍພົລເພົ້າ ສີຍານົນ ຣັຖະມົນຕຣີກະຊວງມະຫາຕໄທ ຂອງ ຣາຊອາ ນາຈັກໄທຍ໌ ໄດ້ເຊີນຮັບປະທານອາ ຫາຣລ້ຽງເພື່ອເປັນກຽດ ແດ່ທ່ານຜູ້ແທນອູ່ນຊນະນິກອນ ແລະ ຄນະ ທີ່ໄປຢ້ຽມຢາມປະເທສໄທຍ໌ ຢູ່ໂຮງແຮມເອຣາວັນ.

ໃນປີ 1957, ສະເດັຈເຈົ້າເພັຊຣາຊ ກັບຄືນຈາກປະເທດໄທຍ໌ ໄດ້ສະເດັຈໄປຢ້ຽມຢາມເມືອງຄຳ. ທ່ານ ເຈົ້າເມືອງໆຄຳພ້ອມດ້ວຍຂ້າຣາຊກາຣປະຊາຊົນ ຣາຊດອນເມືອງຄຳ ໄດ້ຕອ້ນຮັບແລະເຮັດພາບາສີ ຖວາຍພະອົງ ຢູ່ໂຮງການເມືອງຄຳ. ໃນປີດຽວກັນນີ້ ໄດ້ມີຄນະຄົນວຽດນາມມາແຕ່ຮ່າໂນຍ ມາເຈຣະຈາ ເຣື່ອງຊາຍແດນ ຢູ່ບ້ານນ້ຳກັ່ນ, ເມືອງໜອງແຮດ. ການເຈຣະຈາ ແມ່ນບໍ່ໄດ້ຄວາມທັງງ ຈຶ່ງໄດ້ຍົກຍ້າຍ ເລື່ອນການເຈຣະຈາກັນ ໃຫ້ໄປເຈຣະຈາຢູ່ຮ່າໂນຍ. ໃນເດືອນກັນຍາ (September) ປີ 1957 ເມື່ອໄປ ເຖິງຮ່າໂນຍ ໄດ້ລົມກັນຫລາຍມື້ ບໍ່ມີການຕົກລົງກັນອັນໃດເລີຍ ພຽງແຕ່ໄດ້ໂຈະການເຈຣະຈາໄປໃສ່ຂ້າງ ໜ້າ ແລ້ວກໍກັບຄືນມານະຄອນວຽງຈັນທນ໌. ລູງໄດ້ຮັກສາເອົາສຳນວນການເຈລະຈາ ເຣື່ອງຊາຍແດນໄວ້ ຈົນກະທັ້ງບ້ານເມືອງແຕກແລ້ວ ໄທເຮົາໄດ້ໜີມາ. (ຮູບຄນະຜູ້ແທນລາວ ທີ່ໄດ້ໄປລົມນຳຄນະວຽດນາມ ເໜືອ ພ້ອມທັງດຳຣັຖການແຕ່ງຕັ້ງ ແລະຮູບແຜນທີດິນ ທີ່ກ່ຽວຂອ້ງນີ້ ລູງໄດ້ສົ່ງໃຫ້ທ່ານນາຍພົລ ວ່າງ ປາວ ຢູ່ອາເມຣິກາ ໄດ້ຝາກນຳ ລີຕູ້ຊົວ (TouXoua Lyfoung) ລູກຊາຍພຣະຍາຕູ້ບີ ເວລາໄປສະຫະຣັຖ ໄປສົ່ງສະການ ຍາລູງ ຕູ້ເຍີ ມື້ເສັຍຊີວິດ ປີ 2004).

ເດືອນ ພຶສະຈິກາ (November) 1957 ລູງໄດ້ໄປປະຊູມຍູວະສາມາຄົມໂລກຢູ່ໂຕກີວ (Tokyo) ປະເທສ ຍີປູ່ນ ໄປນຳພນະທ່ານເຈົ້າສອບໄຊຍ໌ຊະນະ, ພນະທ່ານອິນແປງ ສຸຣິຍາໄທ, ທ້າວພາໂພນເສນາ (ຄົນ ບ້ານເກີນ) ເຈົ້າສີສະງວັນ (ພັລະຍາທ່ານວັດຖາພານຄຳ), ທ່ານບູນເກັດ, ທ້າວໂງ (ປະທານສະມາຄົມຈີນ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຢູ່ວຽງຈັນທນ໌) ນັ່ງເຄື່ອງບິນອອກຈາກນະຄອນວຽງຈັນທນ໌ ໄປເຖິງໄຊງ່ອນ ວຽດນາມໃຕ້ ແລ້ວ ຕໍ່ໄປລົງມານີລາ ປະເທສ ຟີລິບປິນ. ໄດ້ພັກແວ້ຢູ່ເດີນຍົນຕ໌ມານີລາລະຍະນຶ່ງ ແລ້ວໄດ້ນັ່ງຕັ່ງເຄື່ອງບິນ ແຖວດຽວຕິດກັບ ພະນະທ່ານ ອິນແປງ ສຸຣິຍາໄທ ຈົນໄປເຖິງໂຕກຽວ.

ໃນວັນທີ່ 9 ເດືອນສິງຫາ (August) 1960, ຮ້ອຍເອກກອງແລ ຣັຖປະຫາຣຢູ່ວຽງຈັນທນ໌. ໃນໂອກາດນັ້ນທ່ານເຈົ້າແຂວງຊຽງຂວາງໄດ້ພາພະນະທ່ານຜູ້ແທນ ທ່ານບົວວັນນໍລະສິງ ໄປຢາມເມືອງຄໍາ ເພິ່ນໄດ້ຍິນວິທະຍຸປະກາສ ກອງແລ ປະຕິວັຕ ກໍເຮັດໃຫ້ ພະນະທ່ານໄດ້ຟ້າວກັບເມືອບ້ານ.

ໃນເດືອນທັນວາ (December) ປີ 1960, ກອງທະຫາຣກອງແລ ແລະຄອມມຸຍນິສຕ໌ ໄດ້ເຂົ້າຕີເມືອງຄໍາຄື:

- ສາຍທີ່ໜຶ່ງ ແມ່ນມາຈາກທົ່ງໄຫຫີນຕີເຂົ້າຕາມຕາດເປີບ ຫາບ້ານບານ ແມ່ນທະຫາຣ ກອງແລປະສົມປະເທສລາວ,
- ສາຍທີ່ສອງ ຕີມາຈາກໜອງແຮດ ແມ່ນທະຫາຣມົ້ງລໍ ປະສົມແກວວຽດນາມເໜືອ;
- ສາຍທີ່ສາມ ແມ່ນທະຫາຣແກວຄອມມຸຍນິສຕ໌ ຕີມາຈາກຖໍ້າລາ ພົມເຖິງ ບ້ານຈົ້ ບ້ານຊຽງຄູນກໍຍິງປືນໃຫ່ຍເຂົ້າມາ.

ທະຫາຣຝ່າຍມິຕບໍ່ຮູ້ຈະເຮັດຫຍັງ ເພາະທະຫາຣແກວ ຍິງມາຈາກທຸກດ້ານ ຈຶ່ງໄດ້ຖອຍໜີໄປ ທາງເມືອງແຫ້ ແລ້ວໜີຕໍ່ໄປເມືອງພານ. ກ່ອນແກວຈະມາຕີບ້ານບານ ເມືອງຄໍາ ທ່ານນາຍພົລ ວ່າງປາວ ແລະ ລູງໄດ້ພາທະຫາຣມົ້ງ ມາແຕ່ຊຽງຂວາງ ມາຊ່ວຍ ຕີທະຫາຣແກວ ແນວລາວ ຢູ່ເໜືອ ທົ່ງບ້ານບານ ທາງໄປບ້ານກາງນາ ບ້ານສິບມ້າ. ເມື່ອຮູ້ຂ່າວວ່າ ກອງແລ ເຮັດປະຕິວັຕຢູ່ວຽງຈັນທ໌ນ ລູງໄດ້ຖາມທ່ານນາຍພົລວ່າງປາວ ວ່າ: *"ກອງແລ ຕ້ອງມາຊຽງຂວາງແນ່ນອນ!"* ເພິ່ນຕອບວ່າໄດ້ໃຫ້ທະຫາຣຕັດໄມ້ ເຕັ່ງທາງ ແລະປ້ອງກັນແລ້ວຈະມາບໍ່ໄດ້ ແຕ່ກອງແລ ແຫກອອກຈາກນະຄອນວຽງຈັນທນ໌ ແລ້ວກໍໄດ້ພາກອງທະຫາຣເຂົ້າມາເມືອງສຸຍຍ່າງ ສະບາຍແລ້ວ ຕີເອົາບ້ານບານເມືອງຄໍາ, ທົ່ງໄຫຫີນ, ເຂົ້າຊຽງຂວາງ ຕໍ່ເນື່ອງກັນຢ່າງງ່າຍດາຍ.

ລູງໄດ້ໜີອອກຈາກເມືອງຄໍາ ພ້ອມກັບກອງຮ້ອຍ ທະຫາຣກໍ່ສ້າງ ຜ.ບ ແມ່ນທ່ານຮ້ອຍໂທ ອ່ອນຕາ ພານິທະວົງ, ອອກຈາກບ້ານບານ ມານອນຢູ່ປ່າ ກາງທາງພູໄປເມືອງແຫ້ ແລ້ວຂຶ້ນຕໍ່ໄປທາງບ້ານ ພາພາດໄດ້ໄປພົບກອງພັນທີ່ 23 ຜ.ບ. ແມ່ນຮ້ອຍເອກ ກາ ວິພອນ ທີ່ຖອຍໜີ ມາແຕ່ຊໍາເໜືອ, ຖໍ້າລາ ມາເຖິງເມືອງຄໍາ ຈຶ່ງມາພໍ້ກັນຢູ່ຫັ້ນ. ຫລັງຈາກບ້ານພາພາດ ລູງໄດ້ໄປຢູ່ນໍາກອງຮ້ອຍຂອງ ຣ.ທ. ເນັ່ງຈົ້ ທ່າວແລະ ຣ.ທ. ລີນາວ ເກົາ ຊຶ່ງຕັ້ງຢູ່ທ່າລີນນ້ອຍ ໄດ້ອອກມານໍາເພິ່ນ ແລ້ວມາຂ້າມທາງໃນກາງຄືນ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ລະຫວ່າງ ດົງດ່ານ ຫາບ້ານກິ້ງ ຂຶ້ນໄປຫາພູເຄ ມາເຖິງບ້ານພູເຄ ແລ້ວໄດ້ຍ່າງຂ້າມຜ່ານທົ່ງບ້ານພາ ຂຶ້ນໄປບ້ານຄັງໄຄ້ (ບ້ານເຈົ້າເມືອງ ຢົ້ວຕົງ ຢາງ).

ເມື່ອມາຮອດຄັງໄຄ້ແລ້ວ ທ່ານນາຍພົລ ວ່າງປາວ ຈຶ່ງໄດ້ເອົາຍົນຕ໌ (Helicopter) ມາຮັບໄປຢູ່ປ່າດົງ. ເວລາຢູ່ປ່າດົງ ໄດ້ພາຊາວບ້ານ ສ້າງເດີນຍົນຕ໌, ເມື່ອເຮືອບິນລົງໄດ້ແລ້ວຈຶ່ງໄດ້ຄອບທ່ານນາຍພົລເພື່ອລົງໄປວຽງຈັນທນ໌ໄປຫາທ່ານເຈົ້າແຂວງຊຽງຂວາງ ຢູ່ສວັນນະເຂຕ ເພາະໂຮງການແຂວງຊຽງຂວາງ ຊົ່ວຄາວ ຕັ້ງຢູ່ຫລັງໂຮງການແຂວງສວັນນະເຂດ. ໄດ້ໄປຢູ່ສວັນນະເຂດຫລາຍເດືອນຈຶ່ງໄດ້ນໍາບັນຊີ ແລະເງິນເດືອນຂອງຂ້າຣາຊການ ໄປເບີກໃຫ້ຂ້າຣາຊການແຂວງຊຽງຂວາງທຸກຄົນ ທີ່ຢູ່ນໍາກອງພັນລາວລຸ່ມ ຜ.ບ. ແມ່ນ ພ.ອ. ຈັນສົມ ປາກດີໂມນີວົງ ທີ່ຕັ້ງຢູ່ຜ່າຂາວ, ຊຽງຂວາງ. ຫລັງຈາກເບີກເງິນເດືອນໝົດ ໄດ້ກັບຄືນມາຢູ່ໂຮງການແຂວງ ແນວຫລັງ ຢູ່ກະຊວງມະຫາດໄທຢູ່ວຽງຈັນທນ໌ ເຖິງ ປີ 1962 ຈຶ່ງໄດ້ມາຢູ່ນໍາທ່ານນາຍພົລ ວ່າງປາວ ຢູ່ລ່ອງແຈ້ງ ເພື່ອກໍາກັບນໍາການເລືອກຕັ້ງຜູ້ແທນຣາຊດອນແຂວງຊຽງຂວາງ. ທ່ານນາຍພົລໄດ້ເອົາເຮືອນຫລັງຢູ່ຕໍ່ໜ້າເຮືອນທ່ານ ທີ່ຢູ່ລອ່ງແຈ້ງ ໄກ້ໆສະໂມສອນ ໃຫ້ລູງແລະຄອບຄົວມາພັກເຊົາ.

ໃນປີ 1963, ທ່ານເຈົ້າແຂວງໄດ້ເອົາເອກະສານປວັດສາດເມືອງພວນເປັນພາສາຝຣັ່ງເສສ ທີ່ທ່ານເຈົ້າແຂວງເຈົ້າສາຍຄໍາ ສຸທະກະກຸມາຣໄດ້ຂຽນຫລາຍຄວາມຫລາຍແຖວໄວ້ນັ້ນ ເອົາໄປສົ່ງໃຫ້ທ່ານ Archambault ຢູ່ບາງກອກ (Bangkok). ໃນປີ 1965, ທ່ານນາຍພົລ ໄດ້ສ້າງເມືອງຊໍາທອງ ຂຶ້ນ ຮຽບຮ້ອຍແລ້ວຈຶ່ງໄດ້ຍ້າຍໄປຢູ່ເມືອງຊໍາທອງ.

ໃນປີ 1976, ໄດ້ອົພຍົບໄປຢູ່ຝຣັ່ງ, ເຈົ້າໄຊຍະສຸກ ສຸທະກະກຸມາຣ ລູກຊາຍສາທຸສາຍຄໍາ ທີ່ມາຮຽນຢູ່ປະເທສຝຣັ່ງເສສ ຈຶ່ງໄດ້ໄປເອົາເອກກະສານເຈົ້າສາຍຄໍາ ແລະ ເອົາປຶ້ມສອນປະຫວັດຊາວຕາວັນອອກ ກ່ຽວເຣື່ອງປະຫວັດສາຕເມືອງພວນ ລຽບລຽງໂດຽ ສຖາບັນ Ecole Extreme Orient ແຕ່ລູ້ນ ເຈົ້າເຈັດເຈື່ອງ, ລູກຊາຍຂູນບູລົມ ກ່ຽວເຖິງເຈົ້າຊີວິຕ ແຂວງຊຽງຂວາງ ແຕ່ສັຕະວັຕທີ່ 7 ທີ່ 8 ເມື່ອເພິ່ນລົງມາສ້າງເມືອງພວນ ຈຶ່ງເຫັນປຶ້ມຫົວນີ້ ມີຄວາມເວົ້າເປັນພາສາລາວ ຂອງເຈົ້າເມືອງທ້າວພານ ເມືອງຄໍາ ຂຽນໜັງສືຫາເຈົ້າມະ ຫາອຸປະຣາຊ ເຈົ້າເພັຊຣາຊ ນໍາຫລາຍໃບ.

## ຢູ່ນໍາທ່ານນາຍພົລ ວ່າງປາວ 1962 ເຖິງ 1975

ໃນປີ 1965, ທ່ານນາຍພົລໄດ້ພາໄປພູຜາທີ, ຊໍາເໜືອ ໄດ້ນອນຢູ່ຜາທີ ບ້ານທີ່ຢູ່ໃຕ້ຕີນພູ ທາງຂຶ້ນໄປຫາເທິງພູຜາທີ ນອນນໍານາຍທະຫາຣ ຮ້ອຍໂທ ເກັຍຕູ້ ຫວາລື ວ່າງ ຜ.ບ ກອງຮ້ອຍ ຮັກສາ ພູຜາທີ, ແຂວງຫົວພັນ ເພື່ອປະຊູມປຶກສາ ນໍາເຖົ້າແກ່, ເຈົ້ານາຍ, ພີ່ນ້ອງມົ້ງ ແຂວງຫົວພັນ ກ່ຽວກັບການເລືອກຕັ້ງ ເອົາ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຈົ້າເມືອງນັ້ງ, ຈຶ່ງໄດ້ຊື່ວ່າ ລາວໄທ. ການປຶກສາຫາລື ລົມກັນໄດ້ຍຶດຍາວເຕັມທີ ແຕ່ຫົວຄ່ຳລົມກັນເຖິງ 11-12 ໂມງທ່ຽງຄືນຈຶ່ງແລ້ວ. ເມື່ອປະຊຸມແລ້ວ ຈຶ່ງໄດ້ກິນເຂົ້າແລງເດິກເພິ່ນເຮັດລາບໝູ ມາສູ່ກິນ ຊີ້ນລາບຫວານດີ ແຊບແທ້ ຫົວເຂົ້າແດ່. ກິນແລ້ວ ໃນຄືນນັ້ນກໍເລີຍເປັນໄຂ້ ແຕ່ພູຜາທີ ມາເຖິງຊຳທອງ ກໍໄດ້ໄປນອນໂຮງໝໍຢູ່ ຊຳທອງ. ທ່ານໝໍ ຟີລິບປີນ (Dr. Jany) ໄດ້ໃຫ້ຢາກິນ ແລະຖາມວ່າ ເວລາເຈົ້າໄປພູ້ນ ໄດ້ກິນຫຍັງແດ່? ໄດ້ບອກທ່ານໝໍວ່າ: "*ກິນຊີ້ນໝູ ເຮັດລາບ ຊີ້ນບໍ່ສຸກດີ*" ທ່ານໝໍ ຈຶ່ງຕອບວ່າ "*ແມ່ນເຈົ້າກິນຊີ້ນບໍ່ສຸກດີນັ້ນ ຈຶ່ງພາໃຫ້ເປັນໄຂ້.*" *Dr. Jany* ສັ່ງໄວ້ວ່າ: "*ທາງໜ້າໄປ ຢ່າກິນຊີ້ນໝູບໍ່ສຸກດີ ຈັກເທື່ອເດີ້.*"

ເມື່ອເວລາຢູ່ລ່ອງແຈ້ງຊຳທອງ ທ່ານນາຍພົລ ວ່າງປາວ ອອກໄປກວດຣາຊການ ເບິ່ງກອງທະຫານໃນສນາມຣົບບ່ອນໃດກໍຕາມ ແມ່ນທ່ານໄດ້ກະຣຸນາເອົາຂຶ້ນເຄື່ອງບິນໄປນຳ ເກືອບທຸກບ່ອນ ໄດ້ເຫັນເພິ່ນຍິງປືນໃຫ່ຍ ໃນສນາມຣົບຫລາຍບ່ອນ. ໃນປີ 1960, ໄດ້ໄປບ້ານໄຮ ທາງໄປບ້ານກາງນາ ຫົວນາສີບ ໜ້າ (ທີ່ງບ້ານບານ) ກ່ອນແກວກັບປະເທສລາວ ມາເອົາເມືອງຄຳ ແລະຊຽງຂວາງ. ໄປເບິ່ງສນາມລົບ ເວ ລາຕີເຂົ້າທ່າວຽງ (ບ້ານກ່ຽວມະນາງ ເມືອງອອມ) ໄປເບິ່ງທ່າວຽງ, ໄປເບິ່ງທ່າໂທມ ກຣົມ 13 ຜ.ບ. ແມ່ນ ພ.ອ. ຈັນສົມ ປາກດີໂມນີວົງ ໄດ້ນຳ ກຣົມທະຫາຣ ຕີເຂົ້າທ່າໂທມ, ໄດ້ໄປເບິ່ງເມືອງງານ, ໄປເບິ່ງ ຈອມພູ ຣົ້ມຈ້ອງ ເມືອງງານ ຊື່ງເປັນຄ້າຍທະຫາຣ ສຳຄັນຢູ່ເມືອງງານ, ໄດ້ໄປເບິ່ງສນາມຣົບ ຫົວເມືອງ, ໄປເບິ່ງ ພູຫອັນລອດ ໄກ້ກ່ຽວຟ້າມຶດ ຫົວເມືອງ ກ່ອນເພິ່ນຈະຍຶດເອົາ ກ່ຽວຟ້າມຶດໄດ້. ໄດ້ຢູ່ນາຄັງ, ຕໍ່ມາໄດ້ໄປ ທົ່ງໄຫຫີນ, ໄປລາດຮ້ວງ ໂພນສວັນ. ມື້ໄປລາດຮວ້ງ ໄດ້ຂຶ້ນເທິງພູລາດຮ້ວງ ໃນຫົວພູໄດ້ແນມເຫັນບ້ານນາບູ ທະຫາຣໄດ້ເຫັນສັດຕຣູແກວແລ່ນຢູ່ບ້ານນາບູ ໄດ້ຍິງປືນໃຫ່ຍໄປໃສ່ ບໍ່ນານແກວກໍຍິງໂຕະຕອບມາໃສ່ບ່ອນພວກເຮົາ ເດຊະບູນ ລູກປືນແກວລູກນັ້ນມາຖືກກົກໄມ້ ຕົ້ນໜຶ່ງຢູ່ຕໍ່ໜ້າບ່ອນ ພວກເຮົາຢູ່, ຫາກບໍ່ຖືກກົກໄມ້ ແມ່ນພໍດີມາຕົກໃສ່ພວກເຮົາ ຈັກຈະເປັນແນວໃດ? ແມ່ນບູນບ້ານ ບູນເມືອງ ບູນປາຣະມີ ທຸກຢ່າງກູມກວມແທ້.

ປີ 1966, ແມ່ນປີນ້ຳຖວັນວຽງຈັນທນ໌ ປີຢ້ຽມເບິ່ງການສ້າງເຂື່ອນນ້ຳງື່ມ ແລະໄປເບິ່ງການສ້າງເຂື່ອນຢູ່ປະເທສໄທ໌ຍ. ຍີປູ່ນໄດ້ມາສຳຣວດບ່ອນຈະສ້າງເຂື່ອນ ແລ້ວບັນດາທ່ານເຈົ້າເມືອງທົ່ວຣາຊອານາຈັກລາວໄດ້ໄປທ່ຽວເບິ່ງບ່ອນຈະຕັ້ງເຂືອນຢູ່ແຄມແມ່ນ້ຳງື່ມ ໄດ້ເຫັນເພິ່ນຂຸດດີນເປັນແທ້ງ ເອົາກອງໄວ້ເຕັມເຮືອນໜຶ່ງ ຫລັງຢູ່ບ່ອນຈະສ້າງເຂື່ອນນ້ຳງື່ມ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 90</u>. ນ້ຳຖ້ວມ ດິນຍິນ ວັດໄຕໃນປີ 1966 ສໍ່ໃຫ້ລາວຮູ້ວ່າສະຖານະການໃນລາວຈະຮ້າຍແຮງຂຶ້ນແລະຈະມີການປ່ຽນແປງຫລາຍຢ່າງ.*

ໄດ້ເດີນທາງໄປປະເທສໄທຍ໌ ໄປເບິ່ງເຂື່ອນອູບົນຣັຖ ຈັງວັດຂອນແກ່ນ ເຂື່ອນທີ່ເພິ່ນສ້າງສຳເຣັດແລ້ວ. ຫລັງຈາກເບິ່ງເຂື່ອນ ເຈົ້ານາຍໄທຍ໌ໄດ້ພາເຈົ້າເມືອງ ທີ່ມາຈາກລາວທຸກຄົນ ໄປຢ້ຽມຢາມເບິ່ງບ້ານຊຽງ ແມ່ນບ້ານໄທພວນ ທີ່ໄດ້ອົພຍົບມາແຕ່ແຂວງ ຊຽງຂວາງ ມາຢູ່ປາງກ່ອນມີຈັງວັດອຸດອນ. ເມື່ອເດີນທາງໄປເຖິງບ້ານຊຽງ, ຈັງວັດອຸດອນແລ້ວ ເຈົ້ານາຍ, ເຖົ້າແກ່ ພ້ອມດ້ວຍປະຊາຊົນບ້ານຊຽງ ໄດ້ນຳຂັນດອກໄມ້ຕົກແຕ່ງພາບາສີ ເພື່ອສູ່ຂວັນໃຫ້ບັນດາເຈົ້າເມືອງທຸກຄົນທີ່ມາຈາກລາວ ໄດ້ຈັດມີກາຣຟ້ອນຕອ້ນ ຮັບຢູ່ເວທີບາສີນັ້ນ ມີການຟ້ອນຕາມພະເພນີ ບ້ານຊຽງຫລາຍແນວ ຈົບງາມແທ້ໆ. ເຖົ້າແກ່ຄົນບ້ານຊຽງສູຂວັນແລ້ວ ເພິ່ນວ່າ ພວກເຮົານີ້ກໍແມ່ນມາແຕ່ເມືອງ ຊຽງຂວາງພູ້ນ ບໍ່ຮູ້ຈັກວ່າມາຢູ່ນີ້ດ້ວຍເຫດໃດແທ້!

ເມື່ອມາຢູ່ນີ້ແລ້ວ ກໍໄດ້ຕັ້ງຖິ່ນຖານບ້ານເຮືອນສ້າງສາກາຣຢູ່ກິນ ຮັກຫອມກັນ ເບິ່ງແຍງກັນ ເຮົາຫາກປູກຫາກຊື້ຂາຍນຳກັນ ຄົນຊາຕອື່ນຈະມາຢູ່ນຳກິນນຳຊື້ຂາຍນຳເຮົາໆກໍບໍ່ຂາຍນຳເຂົາໆ ກໍຢູ່ນຳເຮົາບໍ່ໄດ້ ແລະ ບໍ່ຮູ້ເຮົາ. ຄົນບ້ານຊຽງ ປູກມອນລ້ຽງມອ້ນ ທໍໄໝ ຊື້ຂາຍກັນເອງເປັນກ້ອນເປັນໜ່ວຍຮັກແພງກັນແທ້ໆ. ຫລັງຈາກຢ້ຽມຢາມບ້ານຊຽງແລ້ວ ໄດ້ເຂົ້າໄປໂຮງການຂ້າຫລວງຈັງຫວັດອຸດອນ. ຂ້າຫລວງໄດ້ກ່າວຕອ້ນຮັບບັນດາທ່ານເຈົ້າເມືອງທີ່ມາຈາກລາວ ໄດ້ອາທິບາຍການສ້າງສາ ເຮັດໄຮ່ນາ ລ້ຽງສັດ ການກະເສດທຸກຢ່າງ, ຄວາມຮັ່ງມີທຸກຢ່າງ ໃຫ້ບັນດາທ່ານເຈົ້າເມືອງຟັງເປັນເວລາໜຶ່ງຊົ່ວໂມງ ຢູ່ໂຮງການຂອງທ່ານແລ້ວ ກໍໄດ້ພາໄປເບິ່ງຫໍສະມຸດແຫ່ງຊາຕຂອງປະເທສໄທຍ໌ ສ້າງຂຶ້ນໃໝ່ໃຫ່ຍເຈັດຊັ້ນຢູ່ຈັງຫວັດຂອນແກ່ນ. ເຈົ້າໜ້າທີຜູ້ເພິ່ນພາໄປຢ້ຽມຕຶກຫໍສະມຸດເທື່ອນີ້ ອາທິບາຍໃຫ້ຟັງວ່າ ຫໍສະມຸດຫລັງນີ້ ຕ້ອງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສາມາດບັນຈຸ້ປື້ມສະມຸດຕ່າງໆ ໄດ້ 1 ລ້ານ ສອງຮ້ອຍພັນຫົວ ຈຶ່ງຄົບໝົດທຸກຢ່າງ ດຽວນີ້ ຫາມາໄດ້ແລ້ວຢູ່ໃນຫໍສະມຸດມີ 600 ຮ້ອຍພັນຫົວ.

<u>ຫລັງຈາກສ້າງເມືອງຊໍາທອງສໍາເຣັດແລ້ວ</u>

ໂດຍການນໍາພາຂອງ ທ່ານ ນາຍພິລ ວ່າງປາວ, ພ້ອມດ້ວຍ ເຈົ້າສາຍຄໍາ ສຸທະກະກຸມາຣ ເຈົ້າແຂວງຊຽງຂວາງ, ນາຍທະຫາຣ ແລະຂ້າຣາຊການ ໄດ້ເຊີນສເດັຈພຣະເຈົ້າສີສຫວ່າງວັທະນາ ພ້ອມອົງອັຄຄະ ມະເຫສີ ແລະຄນະຣັຖະບາລ ອັນມີ ສເດັຈເຈົ້າສູວັນນາພູມາ ເປັນນາຍົກຣັຖະມົນຕຣີ, ບັນດານາຍພົນ ຂອງກອງທັພແຫ່ງຊາຕ ໄດ້ໄປຢ້ຽມຢາມລ່ອງແຈ້ງ. ເຈົ້າໜ້າທີ່ຂ້າຣາຊການທຸກຝ່າຍໄດ້ຖວາຍ ການບາສີແດ່ສົມເດັຈພຣະເຈົ້າມະຫາຊີວິດ ແລະ ອົງອັຄຄະມະເຫສີ ຢູ່ສະໂມສອນ ທະຫາຣ ເມືອງ ຊໍາທອງ. ເມື່ອຖວາຍພຣະຣາຊບາສີແລ້ວ ສົມເດັຈພຣະເຈົ້າມະຫາຊີວິດ ຂໍສະແດງຄວາມຍິນດີ ຂໍຂອບໃຈນໍາທ່ານນາຍພິລ, ທ່ານເຈົ້າແຂວງ ແລະ ນາຍທະຫາຣ ຂ້າຣາຊການ ປະຊາຣາຊດອນ ທີ່ມາຖວາຍ ພາບາສີພຣະອົງໄດ້ສັ່ງເຈົ້ານາຍວ່າ “ລາວເຮົາຕົກຢູ່ບ່ອນໃດ ກໍຢ່າຫລົງລືມກັນເນີ້! ໃຫ້ຮັກແພງກັນ ລາວເຮົາຜູ້ໃດກໍແມ່ນລູກຫລານຂູນບູລົມໝົດ”, ພຣະອົງ ໄດ້ສັ່ງວ່າດັ່ງກ່າວນັ້ນ.

ກ່ອນພາບາສີ ທ່ານໂລຄໍາທີ ໄດ້ມີໂອກາສຕັ້ງຄໍາຖາມ ຕໍ່ສເດັຈເຈົ້າສູວັນນາພູມາ ທີ່ບ້ານເຈົ້າແຂວງ ສາຍຄໍາ ສຸທະກະກຸມາຣ ວ່າ: “*ສະເດັຈ, ຂ້ານ້ອຍເປັນຫວ່ງນໍາ ບ້ານເມືອງ ທີ່ສະເດັຈສອງ ອ້າຍນ້ອງໄດ້ເອົາແກວມາເຮັດເສິກຢູ່ໃນປະເທສລາວ. ເມື່ອເສິກແລ້ວ ຂ້ານ້ອຍຢ້ານລາວເຮົາຈະໃຊ້ໜີ້ເລືອດ ບໍ່ໝົດຈັກເທື່ອ ແມ່ນບໍ ອົງສະເດັຈ?*” ອົງ ສເດັຈເຈົ້າສູວັນນາພູມາ ຕອບ ອາວຄໍາທີ ວ່າ: “*ບໍ່ເປັນຫັຽງ ເຮົາພະອົງໄດ້ລົມນໍານາຍພິລ ແກວທ່ານ ຟາມວັນດົງ ແລ້ວ, ລາວຕອບວ່າ, ເມື່ອໃດເສິກແລ້ວ ອາເມຣິກາອອກຈາກອິນດູຈີນ, ແກວກໍບໍ່ມີບັນຫາຫັຽງ ທີ່ຈະເອົາທະຫາຣໄວ້ຢູ່ໃນປະເທສລາວອີກ, ຟາມວັນດົງ ເວົ້າແນວນີ້.*” ອາວໂລຄໍາທີເວົ້າຕອບວ່າ: “*ບໍ່ມີຫັຽງແທ້ບໍ? ອົງສະເດັຈ! ຍາມໃດເມື່ອໃດເຮົາເຮັດໄຮ່ເຮັດນາເຂົ້າສຸກແລ້ວຢ່າໃຫ້ແກວມາເກັບກ່ຽວໄປກິນເດີ້!*” ສູວັນນາບໍ່ຕອບແລະບໍ່ເວົ້າຫັຽງຕື່ມ.

ຫລັງຈາກແກວມາຕີຊໍາທອງແຕກແລ້ວ ໄດ້ໄປຕັ້ງໂຮງການ ຢູ່ປາກເມີຍ (ນໍ້າເມີຍຕົກໃສນໍ້າງື່ມ) ລູງໄດ້ເຈັບເປັນໄຂ້ປ່າ ຫລາຍເດືອນ ເກືອບຈະເອົາຊີວິດບໍ່ລອດ. ຄືນນຶ່ງ ມານອນຢູ່ບ້ານທ່ານນາຍພິລ ວ່າງປາວທີ່ລ່ອງແຈ້ງ ວ່າຈະມານອນໂຮງໝໍ ໃສ່ນໍ້າທະເລ ປົວໄຂ້ປ່າ ນໍາທ່ານໝໍ ຄໍາເມົງ ຕຸນາລົມ. ເພິ່ນຈຶ່ງໄດ້ອາທິບາຍໃຫ້ຟັງວ່າເປັນພຍາດໄຂ້ປ່ານັ້ນ ຈະກິນຢາເທົ່າໃດກໍບໍ່ເຊົາ ເພາະແມ່ພຍາດມັນລີ້ຊ່ອນຢູ່ເລິກໃນຮ່າງກາຍຂອງເຮົາ ຈະໃຫ້ດີ ຕ້ອງເອົາຢາໃສ່ນໍານໍ້າທະເລ ແລ້ວສັກໃສ່ຫລາຍມື້ໃຫ້ນໍ້າທະເລ ຊຶມໄປທົ່ວຮ່າງກາຍ ແມ່ພຍາດຈຶ່ງຕາຍໝົດ ແລ້ວຈຶ່ງເຊົາໄຂ້ປ່າໄດ້. ນອນຄືນນັ້ນຢູ່ບ້ານທ່ານນາຍພິລ ວ່າງປາວ ນໍາຍາພໍ່ທິບ ທັມະວົງ ພໍ່ເຖົ້າຍາລູງຕູ້ເຍີ ລີຟຸງ, ຄືນດຽວກັນນັ້ນ ສັດຕຣູໄດ້ເຂົ້າມາທາງພູພຣະຣາຊະວັງ ຍິງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ປືນມາໃສ່ລ່ອງແຈ້ງ ເຮືອບິນໄດ້ມາແຕ່ທາງໃດບໍ່ຊາບ ມາຖິ້ມລະເບີດໃສ່ລ່ອງແຈ້ງຈົນເຖິງນ້ຳງົວ ເຮັດໃຫ້ເສັຍປະຊາຊົນຫລາຍຄົນ ໃນປີ 1971.

ໃນປີ 1973, ໄດ້ໄປນອນຢູ່ໂຮງໝໍພະມົງກຸດເກົ້າ ຢູ່ບາງກອກ (Bangkok) ປະເທສໄທຍ໌ ປີນັ້ນກໍມີທ່ານ ພ.ອ. ຄຳຮູ້ງ ປະວົງວຽງຄຳ ໄປປົວພຍາດລຳໄສ້ ຢູ່ໂຮງໝໍດຽວກັນ, ໄດ້ພົບທ່ານນາຍພົລ ອ້ວນ ຣາຕິກູນ ຜ.ບ. ກອງທັບແຫ່ງຊາຕ. ທ່ານໄປຜາຕັດກ້ອນຫີນອອກຈາກໝາກໄຂ່ຫລັງ, ຫີນໃຫ່ຍເທົ່າຈອມກອັຍ "ນີ້ວກອັຍ" ເພີ່ນວ່າ. ປາດໝາກໄຂ່ຫລັງເທື່ອນີ້ ແມ່ນເທື່ອທີ່ສາມແລ້ວ. ເວລານັ້ນແມ່ນປີດຽວກັນກັບນາຍພົລທ້າວມາ ແລະ ພ.ອ. ບູນເລີດໄຊໂກສີ ມາຖິ້ມລະເບີດໃສ່ຈີໄນໂມ້ແລະໂພນເຄັງ ໃນເດືອນສິງຫາ ປີ 1973.

ຍອັນການເຈຣະຈາ ລະຫວ່າງຝ່າຍຄອມມຸຍນິສ ແລະຝ່າຍວຽງຈັນທ໌ນ ໄດ້ເກີດຂື້ນບັນຫາຫລາຍຢ່າງທີ່ເຮັດໃຫ້ຝ່າຍວຽງຈັນທ໌ນເຊື່ອຝ່າຍຄອມມຸຍນິສບໍ່ໄດ້ ເພາະໄກສອນ ພົມວິຫານ ລູກແກວເປັນຫົວໜ້າ ໄດ້ນຳກຳລັງແກວຄອມມຸຍນິສເຂົ້າໃນປະເທສລາວ ຢ່າງຫລວງຫລາຍ ຝ່າຍວຽງຈັນທ໌ນ ຈຶ່ງໄດ້ເອີ້ນນາຍພົນທ້າວມາ ແລະ ນາຍພົນພູມີ ໜໍ່ສວັນ ກັບມາກໍ່ ການປະຕິວັດຂື້ນ. ເຣື່ອງນີ້ນາຍພົນ ກຸປະສິດ ຜູ້ບັນຊາການພາຄ 5 ບໍ່ຮູ້ ຈຶ່ງໄດ້ຕໍ່ຕ້ານຢ່າງແຂງແຮງ ເພາະເຄີຍມີເຫຕການບາດໝາງກັນມາໃນປີ 1965 ຄື ນາຍພົນກຸປະສິດ ກໍ່ການປະຕິວັດໄລ່ນາຍພົນທ້າວມາ ແລະ ນາຍພົນພູມີ ອອກໄປໃນປະເທສໄທ໌ຍ. ໃນປີ 1973 ນາຍພົນທ້າວມາ ໄດ້ກັບມາຖິ້ມລະເບີດອີກ ແຕ່ເທື່ອນີ້ໄປບໍ່ລອດ ເພາະເຮືອນບິນຖືກຍິງ ຕ້ອງໄດ້ລົງແບບສຸກເສີນ ຖືກຈັບ ແລະຖືກນາຍພົນກຸປະສິດ ຂ້າຖິ້ມກັບບອ່ນ ໃນເດີນຍົນວັດໄຕ. ສາເຫຕນີ້ ກໍມີສ່ວນເຮັດໃຫ້ນາຍພົນບົນປອນ ມາກເທພາຣັກ ບໍ່ຍອມໜີເປັນອົພະຍົບ ຈຶ່ງຖືກຄອມມຸຍນິສ ຈັບເອົາໄປຂັງຄຸກ ໄດ້ເສັຍຊີວິດຢ່າງທໍຣະມານທີ່ສຸດໃນສູນຄຸກທີ່ວຽງໄຊ.

ທ່ານນາຍພົນ ວ່າງປາວ ແລະ ທ່ານເຈົ້າແຂວງສາຍຄຳ ແມ່ນຜູ້ນຳທີ່ມອງເຫັນຄວາມຕ້ອງການຂອງປະຊາຊົນທຸກຢ່າງ. ທ່ານທັງສອງໄດ້ວາງໂຄງການພັທນາຫລາຍແນວ ເພື່ອໃຫ້ປະຊາຊົນມີຢູ່ມີກິນ, ມີ ການສຶກສາ, ມີຄວາມຮູ້, ມີອານາຄົດ, ມີຄວາມເຊື່ອຖືສາສນາ ເພາະສາສນາສອນໃຫ້ຄົນຮູ້ສິນທັມ ຈຶ່ງໄດ້ເຮັດທຸກຢ່າງ ເພື່ອປະຊາຊົນ. ແຕ່ຄວາມຕັ້ງໃຈນັ້ນ ບໍ່ໄດ້ດັ່ງຄວາມປາຖນາ ເພາະເສິກເສືອເໜືອ ແລະໃຕ້.

<u>ວັນທີ່ 21 ເດືອນກູມພາ (February) ປີ 1972</u>

ແມ່ນມື້ປະທານາທິບໍດີ ນິສສັນພ້ອມພັລະຍາ ແລະຄນະຣັຖະບາລສະຫະຣັຖ ໄປຢາມປັກກິ່ງ (Pekin) ປະເທສຈີນແຜ່ນດິນໃຫ່ຍ. ໃນຄືນນັ້ນ ທ່ານນາຍພົລ ວ່າງປາວ ພ້ອມນັກຂ່າວ ອາເມຣິກາ ຄົນນຶ່ງ, ພ.ອ. ຕູ້ຟື ວ່າງ ພ້ອມທະຫາຣຫລາຍຄົນ ແລະ ລູງໄດ້ໄປນອນຢູ່ເທິງພູເບັ້ງ ດ້ວຍເຄື່ອງບິນ ເຮລີໂຄບເຕີ ທີ່ມີ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຄື່ອງຈັກແຮງ ແທ້ໆ ຈຶ່ງໄປລົງຢູ່ ຈອມພູເບັ້ຍໄດ້. ໄປເທື່ອນີ້ ບໍ່ຮູ້ວ່າ ໄດ້ລົງຢູ່ຈອມໂຕໃດ ເມື່ອຫລຽວເບິ່ງພູເບັ້ຍ ຈຶ່ງແມ່ນໃຫ່ຍກວ້າງ ມີຫລາຍຈອມສູງແທ້. ຈອມຕົວທີ່ໄປລົງນີ້ ລົມໄດ້ພັດຕລອດເວລາ 24 ຊົ່ວໂມງ ນອນກາງຄືນກໍໄດ້ຍິນ ສຽງລົມພັດຢູ່ຕລອດ ບໍ່ໄດ້ຂາດສາຍ ເພາະເປັນຈອມພູສູ່ງ ຈອມພູໜ່ວຍນີ້ ມີນ້ຳກ້ອນບໍ່ເປືອຍ ໜາວຫລາຍນອນບໍ່ໄດ້ ຕ້ອງໄດ້ດັງໄຟຝີງ ແລະລົມກັນໝົດຄືນ ກັບນັກຂ່າວອາເມຣິກັນຜູ້ນັ້ນ. ໄດ້ຟັງສຽງຂ່າວວິທະຍຸກະຈາຍສຽງ ປັກກິ່ງ ກ່ຽວກັບການຕ້ອນຮັບຂອງ ຣັຖບາລຈີນ ໃຫ້ຣັຖບາລ



<u>ຮູບທີ່ 91</u> ແມ່ນວັດພຸທຮາມ ທີ່ໄດ້ສ້າງຂຶ້ນໃນປີ1972 ວັດພຸທຮາມນີ້ ກຳກັບດ້ວຍຫລັກຄຳ ບູຣີ ພິສານ ສາຣະຄູນ "ເຈົ້າຣາຊາ ຄນະແຂວງ ຊຽງຂວາງ ພຣະມະຫາ ຄຳພັນ ນັນທະວົງ (ປະຈຸບັນໄດ້ອົພະຍົບໄປຢູ່ປະເທສຝຣັ່ງເສສ) ແມ່ນຮູບອົງທີ່ຢືນຢູ່ໃນຮູບນີ້ ແລະ ໄດ້ນຳພະພຸທທະຮູບອົງໃຫ່ຍ ມາຈາກຣາຊອານາຈັກໄທ່ຍ ມາໃສ່ວັດພຸທທະຣາມນີ້ໃນປີ 1973.

ສະຫະຣັຖ ມີແຕ່ເອົາກອງທະຫາຣ ກອງກຽດຕິຍົດ ໜຶ່ງກອງພັນ ມາຕອ້ນຮັບປະທານາທິບໍດີ ຂອງສະຫະຣັຖ ແລ້ວກໍແຫ່ເຂົ້າໄປນອນຢູ່ໂຮງແຮມ ໃນປັກກິ່ງ. ຈີນບໍ່ໄດ້ຕອ້ນຮັບຄຶກຄື້ນ ຄື ຈີນຕ້ອນຮັບເຈົ້າ ສີຫານຸ ປະມຸກຂອງຂເມນ ທີ່ໄດ້ໄປຢາມຈີນຕອນນັ້ນ, ຣັຖບາລຈີນໄດ້ເອົາປະຊາຊົນອອກມາຕ້ອນຮັບ ແລະ ຫວ່ານດອກໄມ້ຕລອດສຸດເສັ້ນທາງ ນັບແຕ່ລົງເຄື່ອງບິນມາ ຈີນໄປຮອດໂຮງແຮມ. *(ຂໍຂອບໃຈນ້ຳຍາ ຫລວງບູນຈັນ ທີ່ໄດ້ເລົ່າປະວັຕ ແລະ ຄວາມປະສົບປະການຂອງເພິ່ນ ສໄມ 1945 ຫາ 1975 ເປັນປະວັຕໃຫ້ລູ້ນຫລັງ ໄດ້ຮຽນຮູ້.)*


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ການປົກຄອງ ແຂວງຫົວພັນ

ເຈົ້າແຂວງຫົວພັນເລີ່ມຕົ້ນໃນປີ 1947 ແມ່ນທ່ານກິນິນພິນເສນາ, ຕໍ່ມາໃນປີ 1949 ແມ່ນທ່ານວັນ ຕາໂນວັນ (ຜູ້ຮອງແມ່ນທ່ານຄຳປານ ບູນຍະຣິດ) ຕໍ່ມາແມ່ນ ທ່ານຄຳປານ ບູນຍະຣິດ(ຖືກພວກລາວ ຄ.ມ.ນ. ເອົາໄປປະຫານຊີວິດ ຫລັງຈາກ ລາວ ຄ.ມ.ນ. ໄດ້ຍຶດເອົາແຂວງຫົວພັນໄປ). ຫລາຍປີຕໍ່ມາກໍແມ່ນ ທ່ານ ທິງ ສວັດ ວົງສາວັນທອງ ຜູ້ຮອງແມ່ນທ່ານຈຳປາ. ສຖານະການໃນແຂວງຫົວພັນ ວຸ້ນວາຍຍ້ອນການລຸກລາມ ຂອງ ຄອມມູຍນິສຕ໌. ການປົກຄອງ ຈຶ່ງໄດ້ມອບໃຫ້ຝ່າຍທະຫານ ເປັນຜູ້ດູແລ. ປະຊາຊົນໄດ້ອົພຍົບ ໄປຢູ່ຫລາຍບ່ອນ ແລະ ສ່ວນຫລາຍແມ່ນຄອບຄົວທະຫານ ຈຶ່ງເລີ່ມຕົ້ນດ້ວຍ ທ່ານ ພ.ອ. ຄຳສາວ ແກ້ວວິໄລ ແລ້ວ ແມ່ນ ທ່ານ ພ.ອ. ທອງ ວົງຣາຊມີ ໄດ້ເສັຍຊີວິດ1965 ແລ້ວ ແມ່ນ ທ່ານ ພ.ອ. ຜັນ ສີທາຣາຊ ໄດ້ເສັຍຊີວິດ ໃນປີ 1969 ແລ້ວ ແມ່ນທ່ານ ພ.ອ. ບູນນ້ອຍ ຜູ້ລອງແມ່ນ ທ່ານອູ່ນຄຳ ອູໄທທານີ, ໃນປີ 1973 ແມ່ນ ທ່ານ ພ.ອ. ຈັນສົມ ປາກດີໂມນີວົງ ຜູ້ລອງມີສອງຄົນຄື: 1. ທ່ານ ສົມ ວິຈິດວົງສາ 2. ທ່ານທອງສິນ ສໍພາບມີໄຊຍ໌ (ຖືກລອບສັງຫານຕາຍໃນປີ 1973 ຢູ່ບ້ານຊອັນ ທ່ານໄດ້ຈົບການສຶກສາ ດ້ານກົດໝາຍຢູ່ວຽງຈັນທນ໌ ແລະ ເຄີຍໄປຝຶກຕໍ່ຢູ່ ປະເທສຝຣັ່ງເສສ.)

ຝ່າຍຕຳຣວຈແມ່ນ ພ.ຕ.ອ. ຄຳແພງ ສໍພາບມີໄຊຍ໌.

ການປົກຄອງ ແຂວງຫົວພັນມີ 7 ເມືອງດັ່ງນີ້:

| | |
|---|---|
| 1-ເຈົ້າເມືອງໆຊຳເໜືອ: | ທ່ານເພັຍ ແສນພົມມະນີວົງ |
| 2-ເຈົ້າເມືອງໆຫົວເມືອງ: | ທ່ານພົມມາ |
| 3-ເຈົ້າເມືອງໆຊຽງຄໍ້: | ທ່ານແອງ ພວງສວັດ |
| 4-ເຈົ້າເມືອງໆຊອັນ: | ທ່ານພັນທະວົງ ປະວົງວຽງຄຳ |
| 5-ເຈົ້າເມືອງໆໂສຍ: | ທ່ານແຖງ ໂສຍະວົງ, ຕໍ່ມາແມ່ນທ່ານ ອຸທອນ ສໍພາບມີໄຊຍ |
| 6-ເຈົ້າເມືອງໆຊຳໃຕ້ : | ທ້າວບົວເກດ ບູນລືໄຕ |
| 7-ເຈົ້າເມືອງໆໂຮງນົນ: | ທ່ານລາວໄທ ທວາລືວ່າງ |

ໃນປີ 1975 ພ.ອ. ພັນເອນ ເປັນ ຜ.ບ. ເຂຕຍ່ອຍແຂວງຫົວພັນເຖິງເດືອນ ພຶດສະພາ May 14, 1975. ຄນະຜູ້ແທນໃນແຂວງຫົວພັນ ມີຄື: ທ່ານມົວສີ, ທ່ານ ພົມ ບູນລືໄຕ, ທ່ານ ສົມ ວິຈິດວົງສາ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

*(ຂໍຂອບໃຈນຳທ່ານ ເຈົ້າເມືອງລາວໄທ ທວາລີ ວ່າງ ແລະ ທ່ານຄູ ບຸດທະຣັງສີ ດວງສວັນ, ພ.ຕ.ອ. ຣັງ ດີວ ແລະ ທ່ານລອງເຈົ້າແຂວງ ບູນຈັນ ວຸທິສີສົມບັດ ທີ່ໄດ້ປະກອບ ແລະລວບລວມຂ່າວນີ້ໄວ້ເປັນປວັດ ໃຫ້ລູ້ນລູກລູ້ນຫລານໄດ້ອ່ານສືບຕໍ່ໄປວ່າ ໃນອາດີດ ພາຄ 2 ທີ່ ມີແຂວງຊຽງຂວາງ ແລະແຂວງຫົວພັນ ເປັນແນວໃດ? ແລະເປັນຫຍັງ ຊາວເຜົ່າມົ້ງ, ຊາວເຜົ່າລາວ ຈຶ່ງກາຍເປັນອົພຍົບ ໄດ້ໄປຢູ່ຫລາຍປະເທສ ໃນໂລກ.)*



*<u>ຮູບທີ່ 92</u>. ທ່ານເຈົ້າເມືອງລາວໄທທວາ ລີ ວ່າງ*

**(ໃຫ້ອ່ານຊີວະປະວັຕຂອງທ່ານເຈົ້າເມືອງ ລາວໄທ ທວາລີ ວ່າງ ໃນຕອນ ຊີວະປະວັຕຂອງບຸກຄົນສຳ ຄັນ).**

## ຝ່າຍໝໍຢູ່ພາຄສອງ

ທ່ານ ພັນເອກແພດ ຄຳເມີງ ຕຸນາລົມ ເປັນຜູ້ອຳໜວຍການໂຮງໝໍ ທະຫາຣພາຄ 2 ແລະຜູ້ລອງ ແມ່ນ ທ່ານ ພ.ທ. ແພດ ບູນທັນ. ໃນປີ 1972, ທ່ານໝໍຄຳເມີງ ຖືກຍ້າຍມາຢູ່ວຽງຈັນທນ໌ ທ່ານ ພ.ທ. ແພດ ບູນທັນຂຶ້ນແທນ ແລະ ຜູ້ລອງ ແມ່ນ ຣ.ທ. ແພດ ນາງເຫລືອ. ໃນທຸກເຂດທີ່ຢູ່ໃຕ້ການບັງຄັບບັນຊາ ຂອງ ທ່ານນາຍພົລຕຣີ ວ່າງປາວ, ປະຊາຊົນໄດ້ ຮັບການຮັກສາປິ່ນປົວ ດ້ານພະຍາບາລ ຢ່າງພໍໃຈເຖິງ 80 ເປີ ເຊັນ ພ້ອມດ້ານຮັກສາສຸຂະພາບ ແລະ ອານາໄມນັບວ່າທັນສໄມ, ຍ້ອນມີການຊ່ວຍເຫລືອຈາກສະຫະ ຣັຖ ແລະມີເຈົ້າໜ້າທີ ຂອງ ສະຫະຣັຖ ໄດ້ມາສ້າງໂຮງໝໍ ແສນສຸກ ຢູ່ຊຳທອງ.

ໃນເດືອນ ກູມພາ (February) 1969, ໂຮງໝໍໄດ້ຖືກສັດຕຣູ ຄອມມຸຍນິສຕ໌ ທຳລາຍຈຶ່ງໄດ້ຍ້າຍໄປຕັ້ງຢູ່ ບ້ານຊອັນນາຊູ ລິມາໄຊ LS272 ຈົນເຖິງ ວັນທີ່ 14 ເດືອນພຶດສພາ (May) ປີ 1975.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 5.

## ນັກບິນກອງທັບແຫ່ງຊາດພາຄ 2

ໃນຕົ້ນປີ 1966 ນາຍພົລ ວ່າງປາວ ໄດ້ຂໍຮອັງໃຫ້ສະຫະຣັຖ ຊ່ວຍຝຶກນັກບິນ ເຕ-28 (T-28 pilot ) ຂອງພີ່ນ້ອງມົ້ງ. ນັກບິນລາວ ແມ່ນໄດ້ເລີ່ມຮຽນໃນປີ 1965 ແຕ່ເມື່ອໄປຮຽນມາແລ້ວ ບໍ່ຄ່ອຍມີຜູ້ຢາກໄປເຮັດວຽກຢູ່ພາຄ 2 ການໃຊ້ພາສາກໍຍາກ. ດັ່ງນີ້ ນາຍພົລຕຣີ ວ່າງປາວຈື່ງຂໍການສອນ ເປັນພິເສດໃຫ້ນັກຮຽນເຜົ່າມົ້ງ ໃຫ້ມາຮັບໃຊ້ພາຄ 2 ເວລານັ້ນ ຊອກຫານັກຮຽນ ຄົນມົ້ງ ທີ່ເຂົ້າໃຈ ພາສາອັງກິດ ແມ່ນເກືອບບໍ່ມີ.




*<u>ຮູບທີ່ 93</u>. ຈາກຊ້າຍຫາຂວາ: ທ່ານ ທວາເຢີເຈັງ, ທ່ານ ລີ ຕູ້ຊື້ງ, ທ່ານ ຊົງກົວ, ທ່ານນາຍພົນ ວ່າງປາວ, ທ່ານຢາງ ຊົງ ແລະ ທ່ານ ຢາງບີ. ນີ້ແມ່ນຮູບຖ່າຍໃນປີ 1971 ເປັນປີທີ່ສັດຕູ ໄດ້ຍິງທໍາລາຍ ລ່ອງແຈ້ງແພພັງໜັກທີ່ສຸດ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ນັກບິນຣຸ່ນທີ່ 1

ມີ: ວ່າງຕົວ, ວ່າງຈູ, ວ່າງເຢ້ ແລະ ລີລື ນັກບິນ ເຜົ່າມົ້ງ ລຸ້ນທຳອິດ. ເມື່ອຮຽນອອກມາແລ້ວ ນັກບິນວ່າງຕົວໄດ້ຂັບເຄື່ອງບິນໄປກັບຝູງບິນ T-28 ນຳພາໂດຍນັກບິນລາວ ເພື່ອໄປໂຈມຕີ ຖິ້ມລະເບີດໃສ່ທາງໂຮຈິມິນ ຢູ່ເຂດທ່າແຂກ. ນັກບິນທັງສາມຫາຍສາບສູນຕັ້ງແຕ່ 1966. ຕາມສະນິຖານ ເຫັນວ່າເວລານັ້ນ ແມ່ນຍາມລະດູຝົນເຟື້ອໃນທ້ອງຟ້າໜາສຸດ. ທັງສາມ ອາດພາກັນ ບິນໄປຕຳພູ ເພາະມືດບໍ່ເຫັນ, ຫລື ອາດບິນຕ່ຳແລ້ວຖືກ ຍິງ. ວ່າງຈູ ແລະ ວ່າງເຢ້ ຮຽນບໍ່ຜ່ານ. ມີແຕ່ ວ່າງຕົວ ແລະ ລີ ລື ຮຽນຜ່ານ.

ໃນປີ 1966 ລີລື ໄດ້ຖືກຮ້ອງຂໍ ຈາກພົລຕຣີວ່າງປາວ ໃຫ້ມາຮັບໃຊ້ ໄກ້ສິດຢູ່ ພາຄ 2 ແລະ ກໍມີການສັບປ່ຽນກັນ ກັບຝູ່ງນັກບິນລາວ ແຕ່ລະຝູງ ໃຫ້ມາປະຈຳ ຢູ່ລ່ອງແຈ້ງ. ລີລື ໄດ້ນຳພາຝູງບິນ ລາວ ແລະມົ້ງໂຈມຕີ ສັດຕຣູ ທຸກບ່ອນທີ່ເມື່ອຝ່າຍມິດ ມີການເຄື່ອນທີ. ລີລື ເປັນນັກບິນ ທີ່ກ້າຫານ ຍິງລະເບີດໄດ້ແມ່ນຢຳທີ່ສຸດ, ຂນາດຖີ້ມເຂົ້າໃສຂູມຂອງສັດຕຣູ ກໍເຂົ້າຕາມຂູມໄດ້ແທ້. ໃນປີ 1967,1968 ແລະ 1969, ສັດຕຣູ ຂວັນເສັຍຕໍ່ການຖີ້ມລະເບີດຂອງ ລີລື ແລະນັກບິນລາວຫລາຍຄົນ. ການເຄື່ອນທີ່ ສູ້ຣົບສັດຕຣູຈະວາງໜ່ວຍກ້າຕາຍໄວ້ຈຸດໃດ ກໍແມ່ນຝັງໄວ້ໃນຈຸດນັ້ນ ບໍ່ເຫລືອ.

ໃນກາງປີ 1969 ນາຍພົລຕຣີ ວ່າງປາວ ໄດ້ເປີດກາຣລຸກຣົບໂຈມຕີສັດຕຣູທີ່ເອີ້ນວ່າແຜນ "ທະນົງກຽດ" ໄປ ຕາມບໍຣິເວນເມືອງສຸຍ ຫາທົ່ງໄຫຫີນ ນາຍພົລຕຣີ ວ່າງປາວ ໄດ້ບຸກສັດຕຣູ ຮອດເມືອງສຸຍ, ແຕ່ຍັງພູສອງ ໜ່ວຍທາງ ທິສຕາວັນອອກ ຂອງເມືອງສຸຍ, ທີ່ມີປືນ ປ.ຕ.ອ. 12.8 ມ/ມແລະ 14.6 ມ/ມ ແລະ ປືນໃຫ່ຍ 122 ມ/ມ ທີ່ຍິງມາໃສ່ ກຳລັງຂອງຝ່າຍມິຕ ເວລາເຄື່ອງບິນບໍ່ຢູ່ເທິງທ້ອງຟ້າ. ພົລຕຣີ ວ່າງປາວ ຈື່ງໄດ້ສັ່ງໃຫ້ ລີລື ແລະ ນັກບິນລາວ ສອງຄົນໃສ່ ລູກ ລະເບີດ 500 ປອນ ໃຫ້ຕັ້ງການເຈາະລົງດິນເລິກໄປໃຫ້ໄດ້ປະມານນື່ງແມດຕ໌ຢ່າງຕ່ຳ ແລະໃຫ້ຖີ້ມເທື່ອລະລູກ ຕາມສັນພູ,ຈາກທາງທິສ ຕາວັນຕົກ ຫາທິສຕາວັນອອກ. ລີລື ກໍໄດ້ປະຕິບັຕຕາມແຕ່ ເຄື່ອງບິນ ມີນ້ຳໜັກຫລາຍ ຍ້ອນບອ່ມ 6 ລູກ ແລະ ນັກບິນສອງຄົນ, ຜູ້ ນັ່ງເບື້ອງຫລັງ ຊື່ ລໍເນັ້ງ ຮຽນຝຶກຖີ້ມລະເບີດ ນຳ ລີລື ລົງຖ້ຽວທີ່ນື່ງບໍ່ເປັນຫຽັງ ແຕ່ຖ້ຽວທີ່ສອງເວລາເຄື່ອງບິນເຈີດຂຶ້ນ ສັດຕຣູໄດ້ຍິງໄລ່ຕາມຫລັງ ເຄື່ອງບິນດ້ວຍ ປ.ຕ.ອ. 12.8 ມ/ມ ແລະ 14.6 ມ/ມເຄື່ອງບິນເກີດໄຟໄມ້ແລະ ຕົກລົງ ໂດຽບໍ່ເຫັນນັກບິນ ໂດດຈອ້ງອອກໄປ ນາຍພົລຕຣີ ວ່າງປາວ ເສັຍໃຈຈົນນ້ຳຕາຕົກ ທ່ານໄດ້ກັບບ້ານ.

ມື້ຕໍ່ມາ ຝ່າຍມິຕໄດ້ບຸກເຂົ້າໄປຍຶດພູໄດ້ ແລະໄດ້ ຊອກເອົາຊາກສົບຂອງ ຣ.ອ. ລີລື ແລະ ຣ.ທ. ລໍເນັ້ງມາເຮັດພິທີ ສົ່ງສການຢູ່ລ່ອງແຈ້ງ. ນັກບິນ ລີລື ແມ່ນນັກບິນທີ່ເຮັດວຽກດີ ກ້າຫານ ສູ້ຕາຍບໍ່ເຄີຍຢ້ານແລະປະລະໜ້າທີ່ ເປັນນັກບິນທີ່ອອກບິນໂຈມຕີ ສັດຕຣູ ມື້ລະຫລາຍຖ້ຽວ ແລະບິນຫລາຍຊົ່ວໂມງ ກວ່າ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ນັກບິນອື່ນ ໆ ໃນໂລກ ເປັນທີ່ເລົ່າລື ແລະ ສັນລະເສີນຈາກ ສະຫະຣັຖ ຢ່າງດີ. ຫລັງຈາກລຸ້ນນັກບິນ ຣ.ອ. ລີລື ແລ້ວກໍມີ ນັກບິນ ຫລາຍລຸ້ນດັ່ງຕໍ່ລົງໄປນີ້:

## ນັກບິນຣຸ່ນທີ່ 2

ເລີ່ມໄປຮຽນໃນກາງປີ 1968 ໄດ້ອອກມາເລີ່ມປະຕິບັດໜ້າທີ່ໃນກາງປີ 1969.

1. ນັກບິນ **ລໍເນັ້ງ** ຖືກຍິງຕົກເສັຍຊີວິຕ ພ້ອມນັກບິນ ລີລື ໃນ 1969.
2. ນັກບິນ **ລີເຢັງ** ຖືກຍິງຕົກຄາ ກົກໄມH ຢູ່ໄກHທົ່ງໄຫຫີນ ເສັຍຊີວິດ .ໃນປີ1970.
3. ນັກບິນ **ເຢັຍທ່າວ** ຖືກຍິງຕົກຢູ່ທົ່ງໄຫຫີນ ຕົ້ນ 1970 ເອົາສົບບໍ່ໄດ້.
4. ນັກບິນ **ມົວເຕົ້ງ** ຖືກຍິງຕົກທີ່ ພູຫີນຕັ້ງ ຕົ້ນ 1971 ຫລັງຈາກເສັຍທົ່ງໄຫຫີນຄືນໃຫ້ສັດຕູ.
5. ນັກບິນ **ວ່າງເດົ້າ** ເສັຍຊີວິດຢູ່ລ່ອງແຈ້ງ ຍ້ອນລົງກາງເດີນ ເບຣກບໍ່ຢູ່ ມາຕຳສາງເຄື່ອງ

   ຕາຍຄາ ຍົນຕ໌.
6. ນັກບິນ **ເຮີຢີ້ງ** ເສັຍຊີວິດຢູ່ໂຮງຮຽນຝຶກ, ເຄື່ອງບິນຕິດຄັດ ນາຍຄຣູໂດດລົງປອດພັຍ ນັກ ຮຽນໂດດ ອອກບໍ່ໄດ້.
7. ນັກບິນ **ຢາງຊົງ** ເປັນນັກບິນທີ່ສລາດ ແລະໄດ້ຕໍ່ສູ້ກັບສັດຕຣູ ຖືກຍິງ ຫລາຍເທື່ອແຕ່ກໍລອດອອກ ມາໄດ້ຢ່າງວູດວິດ ໄດ້ມາຂັບເຄື່ອງບິນຊີ້ເປົ້າໝາຍປະມານ 1 ປີ ປາຍ ແລະເປັນຫົວໜ້າຝູງບິນ ເຈົ້າຜາ ຂາວໃນພາຄສອງ. ໄດ້ອົພຍົບມາຢູ່ ສະຫະຣັຖ ຢູ່ເມືອງແຊງໂປຣ ຣັຖມິເນໂຊຕາໄດ້ເສັຍ ຊີວິດໃນປີ 2004.
8. ນັກບິນ **ວ່າງເສົ້ງ** ໄດ້ມາບິນຕໍ່ສູ້ສັດຕຣູໄດ້ປະມານ 2 ປີ ໄດ້ເສັຍຊີວິຕມາຈາກອາກາສບໍ່ດີ ແລະ ດ້ວຍເຫຕການດັ່ງຕໍ່ໄປນີ້ ພ.ອ. ເຈີປາວມົວ ຜູ້ບັນຊາການໜ່ວຍຣົບບວມຫລົງ ໄດ້ເອີ້ນຂໍໃຫ້ທ່ານ ນາຍ ພົລຕຣີ ວ່າງປາວ ໃຫ້ສົ່ງເຄື່ອງບິນໄປຊ່ວຍຝ່າຍມິຕ ທີ່ຖືກສັດຕຣູກຳລັງບຸກໂຈມຕີຢ່າງນັກໃນຄືນກ່ອນ ສັດຕຣູໄດ້ເຂົ້າ ມາປະເຊີນໜ້າກັບໜ່ວຍຕໍ່ສູ້ຝ່າຍມິຕ ທີ່ຢູ່ພູ ທິສຕາວັນຕົກ ຂອງເດີນຍົນຕ໌ບວມຫລົງ. ສັດຕຣູ ກຳລັງຂຸດອຸມົງເຂົ້າຫາຄ້າຍແລະໄກ້ເຕັມທີ ພ້ອມທັງຍິງປືນໃຫຍ່ໄປໃສ່ບໍ່ຂາດໄລຍະ. ດັ່ງນັ້ນ ໜ່ວຍກວດລ້າງຂອງຝ່າຍມິຕ ຈຶ່ງບໍ່ສາມາດອອກໄປກວດລ້າງ ຈຳເປັນ ຕ້ອງຂໍການ ສນັບສນູນທາງ ອາກາສຊ່ວຍ. ນັກບິນວ່າງເສົ້ງ ຈຶ່ງໄດ້ສົ່ງບິນໄປຄົ້ນດຽວ ເພື່ອໄປສນັບສນູນທາງອາກາສ ຊ່ວຍພໍ່ເຖົ້າ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 94</u>. ຮູບນັກບິນເຕ-28 ວ່າງເສັ້ງ. ບິນໄປຊ່ວຍພໍ່ເຖົ້າໂຈມຕີສັດຕູ ຂາກັບເພື້ອມຶດ ລົງຕ່ຳໄດ້ຕຳພູ ເສັຍຊີວິຕ ໃນ ປີ 1971.*



*<u>ຮູບທີ່ 95</u>. ພາບນີ້ແມ່ນຂບວນແຫ່ສົບຂອງ ຣ.ອ.ອ. ວ່າງເສັ້ງ ໄປທີ່ປ່າຊ້າຝັງສົບໃນປີ 1971. ເປັນທີ່ລະລຶກ ນາຍທະຫາຣຫລາຍຄົນທີ່ຢູ່ໃນຮູບນີ້ ໄດ້ຈາກພວກເຮົາໄປແລ້ວ.*

ຕາມຄຳບອກເລົ່າຂອງ ພ.ອ. ເຈີປາວມົວ ປະມານນຶ່ງຊົ່ວໂມງກ່ອນນັກບິນ ວ່າງເສັ້ງຈະໄປເຖິງ ຈຸດຖິ້ມລະເບີດ ໄດ້ມີເຫຕການ ແປຣກປະລາດເກີດຂຶ້ນ ຄື: ທູງຊາຕລາວ ຢູ່ເທີງເສົາ ຕັ້ງຢູ່ກາງເດີນໄດ້ຕົກລົງມາຢ່າງບໍ່ມີລົມພັດ, ເພື້ອມຶດຕຶບ ທີ່ອ້ອມທົວພູ ບ່ອນທີ່ສັດຕຣູໄດ້ປິດລ້ອມໄວ້ນັ້ນ ໄດ້ເປີດແຈ້ງອອກ ເຮັດໃຫ້ນັກບິນ ວ່າງເສັ້ງ ສາມາດເບິ່ງເຫັນຈຸດຂອງສັດຕຣູໄດ້ຢ່າງສະບາຍ ວ່າງເສັ້ງໄດ້ຖິ້ມລະເບີດໃສ່ ອຸມົງຂອງສັດຕູຈົນຕາຍຄາຮູທັງໝົດ. ການຍິງປືນໃຫ່ຍກໍໄດ້ຢຸດຕິລົງ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຝ່າຍມິດຈຶ່ງສາມາດອອກໄປກວດລ້າງ. ພ.ອ. ເຈີປາວມົວ ດີໃຈທີ່ສຸດ ໄດ້ສັ່ງໃຫ້ ວ່າງເສັ້ງ ກັບໄປອີກນຶ່ງຖ້ຽວ ເພື່ອໄປຊ້ຳເຕີມໃສ່ ປືນໃຫ່ຍຂອງ ສັດຕຣູ ທີ່ຢູ່ໄກ້ຄ້າຍນັ້ນ. ແຕ່ ວ່າງເສັ້ງ ໄດ້ຫາຍຈາກທອ້ງຟ້າ ແລ້ວກໍຫາຍໄປເລີຍ ບໍ່ເຫັນກັບຄືນມາອີກ. ສາເຫຕເກີດຂື້ນຄັ້ງນັ້ນ ແມ່ນຕອນກັບຈາກບອມຫລົງ ໄປໄກ້ຈະເຖິງລ່ອງແຈ້ງ ເພື້ອມືດ ເບີ່ງບໍ່ເຫັນເດີນຍົນຕ໌ ວ່າງ ເສັ້ງ ໄດ້ບິນຕ່ຳລົງ ເພື່ອຈະພະຍາຍາມບິນຜ່ານເພື້ອ ເຂົ້າເດີນຍົນລ່ອງແຈ້ງ ແລະກໍຕ້ອງບິນຜ່ານເທີງ ພູໝອກທີ່ມີກົກໄມ້ສູງ ບາງເອີນໂຊກບໍ່ດີ ຫາງເຄື່ອງບິນໄດ້ໄປເກາະງ່າໄມ້ ຢູ່ເທີງພູ ໝອກເຮັດໃຫ້ເຄື່ອງບິນກະທົບລົງພື້ນດິນ ຍົນຕ໌ຂາດເປັນສອງທອ່ນ.

ຂ້າພະເຈົ້າ ໄດ້ບິນໄປຊອກຄົ້ນຫາເຄື່ອງບິນ ຈຶ່ງໄດ້ພົບຍົນຕ໌ ແລະສົບຂອງວ່າງເສັ້ງ ຈຶ່ງໄດ້ນຳມາເຮັດພິທີທາງສາສນາ ຢູ່ລ້ອງແຈ້ງ ແມ່ນໃນຕົ້ນ ເດືອນທັນວາ December 1971.

9. **ນັກບິນ ວ່າງສີ** ໄດ້ປະຕິບັຕໜ້າທີ່ດີທີ່ສຸດ. ຜູ້ກ່ຽວໄດ້ບິນໄປໂຈມຕີທີ່ໝັ້ນຂອງສັດຕຣູຫລາຍຈຸດຍິງໄດ້ແມ້ນຍຳ, ແນ່ນອນ ເໝືອນກັນກັບ ນັກບິນ ລີ ລື. ວ່າງສີ ໄດ້ຖືກ ປ.ຕ.ອ. ຂອງສັດຕຣູຍິງຕົກ ສອງຄັ້ງ ຄັ້ງທີນຶ່ງ ລອດໄດ້ຍ້ອນໄດ້ຮັບການຊ່ວຍເຫລືອຈາກເຄື່ອງບິນເຮລິໂຄບເຕີຂອງສະຫະຣັຖ ແລະບໍ່ໄດ້ຖືກ ບາດເຈັບ ແຕ່ຄັ້ງທີ່ສອງ ວ່າງ ສີ ຖືກຍິງດ້ວຍ ປືນ ປ.ຕ.ອ 37 ມ/ມຂອງສັດຕຣູ ຍິງ ຕັດໜ້າໂດຍວ່າງສີ ບໍ່ຮູ້ສືກຕົວດັ່ງຕໍ່ໄປນີ້: ໃນປີ 1972 ຝ່າຍມິຕໄດ້ເຂົ້າໄປຍຶດເອົາທົ່ງໄຫຫີນຄືນ ໄດ້ເຄື່ອນໄປເຖີງລາດແສນ. ສັດຕຣູໄດ້ປະຖີ້ມຣົຖຖັງນຶ່ງຄັນ ໄວ້ກາງເດີ່ນລາດແສນ, ຍົນຕ໌ຍິງ ສັດຕຣູ ເອົາໜີບໍ່ທັນເພາະຕອນເຊົ້າ ມື້ນັ້ນ ລີຕູ້ຊົ້ງ ນັກບິນຊີ້ເປົ້າໝາຍ ໄດ້ບອກໃຫ້ນັກບິນ ເຕ-28 ວ່າງບີ ທຳລາຍຣົຖຖັງ ທີ່ແລ່ນນຳກັນສາມລຳ, ສອງລຳຖືກທຳລາຍ ແຕ່ຍັງຄັນນຶ່ງ ຍິງບໍ່ຖືກດີ ເພາະ ລະເບີດໝົດເສັຍກ່ອນສັດຕຣູໄດ້ປະ ຖີ້ມໄວ້ກາງເດີ່ນລາດແສນ ທ່ານນາຍພົລ ວ່າງປາວ ຈຶ່ງໄດ້ສັ່ງໃຫ້ນັກບິນ ວ່າງສີ ແລະ ມົວຈື້ກັບໄປຊ້ຳເຕີມໃຫ້ເສັຍ.

ເມື່ອ ວ່າງສີ ໄປຮອດ ສະພາບການໄດ້ປ່ຽນແປງ ສັດຕຣູໄດ້ຕຽມທ່າປ້ອງກັນຣົຖຖັງໄວ້ໝົດ ລໍຖ້າໃຫ້ຄ່ຳພວກເຂົາຈຶ່ງໄປເອົາອອກ. ຈຶ່ງເປັນໂອກາດໃຫ້ ວ່າງສີ ໄດ້ຮັບຄຳສັ່ງໄປທຳລາຍ. ວ່າງສີ ໄດ້ລົງຖີ້ມລະເບີດຖ້ຽວທີ່ໜຶ່ງ ບໍ່ຖືກ ນັກບິນມົວຈື້ ກໍລົງຕາມຫລັງເຂົ້າມາທິສເໜືອ ໄປຫາທິສໃຕ້ ຖີ້ມລະເບີດໃສ່ ບໍ່ຖືກຄືກັນ ວ່າງສີ ໄດ້ເອີ້ນຫາ ມົວຈື້ວ່າ: *"ບີ້! ໂຕເບີ່ງເດີ໋! ຄັນບາດນີ້ບໍ່ຖືກ ໂຕເອີ້ນເຮົາເປັນໝາກໍໄດ້!"*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com





*ຮູບທີ່ 96 (ຊ້າຍມື). ນັກບິນ ເຕ-28 ວ່າງສື ເສັຍຊີວິດ ໃນເວລາບຸກເຂົ້າທົ່ງໄຫຫີນ ໃນປີ 1972 ທີ່ ລາດແສນ ຖືກ ປ.ຕ.ອ 37 ມມ.*
*ຮູບທີ່ 97 (ຂວາມື). ຈາກຊ້າຍຫາຂວາ ທ່ານ ວື້ເນັ້ງ, ນັກບິນ ເຕ-28 ວ່າງສື, ນັກບິນ 01 ຢ່າງຊົງ ແລະ ນັກບິນ ເຮທີ 34 (HT34) ຫວ່າງບີ 1971.*

ວ່າງສື ບິນລົງຕາມແຜນເກົ່າ ບິນຈາກທິສເໜືອໄປຫາທິສໃຕ້ ແຕ່ສັດຕຣູໄດ້ຕັ້ງປືນ ປ.ຕ.ອ. 37 ມ/ມ ສອງ ກະບອກຢູ່ບ້ານໂຕນ ທາງຕາວັນຕົກຂອງລາດແສນ ຍິງເປັນໜ້າກະດານ ຕັດໜ້າ ວ່າງສື, ລູກກະສູນ ປ.ຕ.ອ. ໄດ້ຖືກຍົນຕ໌ໆໄດ້ລະເບີດ ຕົກລົງກັບພື້ນດິນລາດແສນ. ມົວຈື້ ໄດ້ເຈີດຂຶ້ນສູງ ໄດ້ເອົາລະເບີດທີ່ເຫລືອ ໄປຖີ້ມໃສ່ແຖວປືນ ປ.ຕ.ອ. ດັ່ງມາ ພາໃຫ້ນ້ຳຕາ ມົວຈື້ ຕົກ (ມົວຈື້ ເປັນຜູ້ເວົ້າ) ຈຶ່ງໄດ້ບິນກັບລ່ອງແຈ້ງ.

ເວລາກໍໃກ້ຈະຄ່ຳແລ້ວ ຈຶ່ງບໍ່ສາມາຕໄປເອົາສົບ. ມື້ຕໍ່ມາ ຝ່າຍມິຕໄດ້ໂຈມຕີສັດຕຣູ ໄດ້ເຂົ້າໄປເຖິງຈຸດບ່ອນຍົນຕ໌ຂອງ ວ່າງສື ຕົກ ຂ້າພະເຈົ້າ ຜ.ບ ກອງພົນສອງ ໄດ້ສັ່ງ ທະຫາຣ 50 ຄົນເດີນເປັນໜ້າກະດານຢ່າງຄົ້ນຫາສົບຂອງ ວ່າງສື ໄດ້ພົບຊາກຍົນຕ໌ ແຕ່ບໍ່ພົບສົບຂອງນັກບິນ.ດັ່ງນີ້ ຈຶ່ງໄດ້ຍ່າງໄປດ້ວຍຕົນເອງ ເລາະໄປຕາມແຄມຫວ້ຍນ້ຳແສນ, ໄດ້ເຫັນທ່ອນໄມ້ໄຜ່ນຶ່ງທ່ອນ ຟູຂຶ້ນຫລູບລົງ ຢູ່ໃນກາງນ້ຳຫວ້ຍນ້ຳແສນ ເຫັນຜ້າແພມັດຢູ່ເຄິ່ງກາງ ທ່ອນໄມ້ໄຜ່ນັ້ນ, ສົງໄສ ຈຶ່ງໄດ້ສັ່ງໃຫ້ທະຫາຣ ລົງໄປດຶງເອົາທ່ອນໄມ້ໄຜ່ຂຶ້ນມາເບິ່ງ ຈຶ່ງເຫັນສົບຂອງນັກບິນ ວ່າງສື ມັດຕິດຢູ່ກັບທ່ອນໄມ້ໄຜ່ດັ່ງກ່າວ ໄດ້ນຳສົບໄປທຳພິທີສົ່ງສະການ ຢູ່ລ່ອງແຈ້ງ.

10. ນັກບິນ **ວື້ເຢີ** ໄດ້ມາປະຕິບັດງານ ບໍ່ດົນເທົ່າໃດກໍຖືກສັດຕຣູໃຊ້ ປ.ຕ.ອ. ຍິງຕົກ. ສັດຕຣູໄດ້ໃຊ້ປືນປືນຕໍ່ຕ້ານອາກາສ ອັນທັນສໄມ ຍິງຕໍ່ສູ້ເຄື່ອງບິນ ເຕ-28, ທີ່ແມ່ນເຄື່ອງບິນສໄມສົງຄາມໂລກຄັ້ງທີ່


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສອງ ແລະບິນບໍ່ໄວ ແມ່ນເຄື່ອງບິນຝຶກ ບໍ່ແມ່ນເຄື່ອງບິນຕໍ່ສູ້ໂຈມຕີສັດຕູ ແຕ່ແມ່ນເຄື່ອງບິນທີ່ ຊ່ວຍການເຄື່ອນທີ່ຂອງຝ່າຍມິດໄດ້ດີທີ່ສຸດ ຫາກບ່ອນໃດສັດຕູ ສູ້ຕາຍແມ່ນຝັງສັດຕູໄວ້ບ່ອນທັ້ນໂລດ.



*ຮູບທີ່ 98. ນັກບິນ ເຕ-28 T-28 pilot ວື້ເຢີ ໃນປີ1970 Vue Ger*

# ນັກບິນຮຸ່ນທີ່ 3

1. **ນັກບິນລີເຕັ່ງ** ໄດ້ບິນເຕ-28 ແລະ ເຊ C47 ໃນປີ 1975 ອົພຍົບ ໄປຢູ່ກາລີຟອກເນັຍ, ສະຫະຣັຖ.
2. **ນັກບິນ ວື້ລົ້ງ** ຖືກຍິງຕົກເສັຍຊີວິດ ຢູ່ໄກ້ພູລ້ຽງແກ້ (ກາງ ພູຜາໄຊ ແລະ ພູຫີນຕັ້ງໃນ 1971)
3. **ນັກບິນ ວ່າງບີ**, ເປັນເຜົ່າມົ້ງຄົນນື່ງ ທີ່ໄດ້ບິນຫລາຍຊົ່ວໂມງກວ່ານັກບິນຄົນອື່ນ ໆຄື:

   ໃນປີ 1970-1973 ຂັບເຮືອບິນເຕ-28, ປີ 1973-1975 ຂັບເຄື່ອງບິນ ບາຣອນ Baron.

   ໃນປີ 1974-1975 ຂັບ ເຄື່ອງບິນ ເຊັດຊະນາ ແລະ ເຄື່ອງບິນ ບາຣອນ ປະຈຳທ່ານນາຍພົລຕຣີ ວ່າງປາວ.

   ໃນປີ 1973 ໄດ້ຂັບເຄື່ອງບິນ ເຕ-28 ໄປຊ່ວຍຝ່າຍມິດທີ່ເມືອງໜອກ ຖືກສັດຕຣູ ຍິງເຄື່ອງບິນຕົກຢູ່ (LS46) ນັກບິນອາເມຣິກັນ ແລະນັກບິນລາວໄດ້ໄປຊ່ວຍໄວ້ໄດ້.

   ໃນວັນທີ່ 13 ມີນາ (March) 1973 ທ່ານນາຍພົລຕຣີ ວ່າງປາວ ຈຶ່ງໄດ້ຈັດ ພິທີສູ່ຂວັນໃຫ້ນັກບິນວ່າງບີ ແລະນັກບິນ ມົວຈີ້ ພ້ອມກັນໃນວັນດຽວ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຜູ້ບັນທຶກໄດ້ຈຳຄວາມເວົ້າຂອງນັກບິນ ວ່າງບີ ເວົ້າຢູ່ຕອນນີ້ງວ່າ: “ແກວຍິງປືນຕາມແຜນ ແລະແມ້ນຢຳ ດີ ທັງມີເລ່ຫລ່ຽມ ມີເຄື່ອງປອມຫລອກ. ຖ້ານັກບິນປະໝາຕ ແມ່ນເສັຍປ່ຽບໃຫ້ແກວ. ເຮົາຢູ່ເທິ ງອາກາສກໍມີຍຸທທະວິທີ ມີໂອກາສໃຊ້ແຜນຫລາຍກວ່າ ແຕ່ຕ້ອງສັງເກດເບິ່ງທ່າທີຂອງສັດຕຣູ, ຮູ້ອ່ານ ໜ້າດິນ ອາ ກາສ ເວລາເຂົ້າໂຈມຕີ, ດັນລົງແລະເຈີດຂຶ້ນ. ຖ້າບໍ່ຈຳເປັນແທ້ ສັດຕຣູຈະບໍ່ກ້າຍິງເຄື່ອງບິນ. ນັກບິນ ວ່າງບີ ເວົ້າວ່າ: “ທຸກຄັ້ງ ທີ່ຝ່າຍມິຕເອີ້ນຂໍການສນັບສນຸນທາງອາກາສ ແລະ ບອກວ່າສັດຕຣູມີ ປືນ ປ.ຕ.ອ. (ປືນຕໍ່ຕ້ານທາງອາກາສ) ນັກບິນຈະຕ້ອງໂຈມຕີ ປືນ ປ.ຕ.ອ. ກ່ອນອື່ນ. ສັດຕຣູ ມີຄວາມຢ້ານກົວ ເຄື່ອງບິນ ເຕ-28 ກວ່າເຄື່ອງບິນໄອພົ່ນ“.

ໃນ 1971 ຝ່າຍມິຕໄດ້ບຸກໂຈມຕີໄປໃສ່ທົ່ງໄຫຫີນດັ່ງນີ້:

- ກຣົມ 21; ກຣົມ 26 ໄດ້ຖືກມອບໝາຍໃຫ້ຍຶດເອົາລາດບວກ ແລະ ພູຮວດ ເປັນທີ່ໝັ້ນ.
- ກຣົມ 24 ແລະ ກຣົມ 22 ພ້ອມກັບກຳລັງສ່ວນນຶ່ງຂອງ ຍາພໍ່ ເຈີປາວມົວ ພາຣະກິຈແມ່ນ ໃຫ້ໂຈມຕີຍຶດເອົາໜອງເປັດ ແລະ ຕາດເປີບ ເພື່ອຕັດທາງເລຂທີ່ 7 ດ້ານຫລັງຂອງສັດຕຣູ.

ນັກບິນວ່າງບີ ເວົ້າວ່າ: “ການໄປໂຈມຕີ ຖິ້ມລະເບີດສນັບສນຸນ ການເຄື່ອນທີ່ຂອງຝ່າຍມິຕໃນຄັ້ງນັ້ນ ທີ່ ລາດບວກ ໄດ້ສັງເກສເຫັນວ່າ ສັດຕຣູ ບໍ່ໄດ້ຢ້ານ ເຕ-28 ເລີຍ ພວກເຂົາອອກໄປຮ້ອງໂຮ ຢ່າງ ສະບາຍໃສ່ເຄື່ອງບິນ ເຕ-28 ແລະ ຍິງປືນນ້ອຍໃສ່ຍົນຕ໌ ຍືນໃຫ້ຍົນຕ໌ ຖິ້ມລະເບີດໃສ່ ຄືຕົວເປັດຕົວໄກ່ ຕົວໝູ”. ພາຍ ຫລັງຝ່າຍມິຕເຂົ້າຍຶດໄດ້ພູ ໄດ້ເຫັນວ່າ ຝ່າຍສັດຕຣູໄດ້ປະຖິ້ມສົບໄວ້ ໃນພື້ນທີ່ນັ້ນ ເປັນຮ້ອຍກວ່າສິບ ຢູ່ຕາມຮ່ອມ ແລະ ຢູ່ຕາມຂູມ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 99</u>. ນັກບິນ ເຕ-28 ວ່າງບີ ໃນ 1973*

***(ເຊີນອ່ານຊີວະປະວັດຫຍໍ້ ຂອງ ຣ. ອ. ອ. ວ່າງບີ ໜ້າຊີວະປະວັດ)***

ສົບຄົນຕາຍຂອງສັດຕຣູ ມີທັງຍິງແລະຊາຍ ຍັງໜູ່ມໆທັງນັ້ນ ຕາມທີ່ໄດ້ສັງເກດເບິ່ງໃນຄັ້ງນັ້ນ, ມັນເປັນແຜນການຫລອກຂອງສັດຕຣູ ເພາະວ່າພວກສັດຕຣູໄດ້ຕັ້ງ ປືນ ປ.ຕ.ອ. ຢູ່ໄກ້ຄັງໄຂ ຖ້ານັກບິນເຂົ້າລົງຖິ້ມລະເບີດທາງທິສໃຕ້ແລ້ວເຈີດໄປທາງທິສເໜືອ ຕາມຮ່ອມພູ ແມ່ນບໍ່ເຫລືອ ເພາະຕົກຢູ່ໃນເປົ້າໝາຍຍິງປືນ ປ.ຕ.ອ. 37 ມ/ມຂອງສັດຕຣູ ທີ່ຍິງໄດ້ສູງກວ່າ 10 ພັນຟຸດ. ເຕ-28 ບິນສູງປະມານ 8 ພັນຟຸດເທົ່ານັ້ນ ໃນ ເວລາເຈີດຂຶ້ນແລະລົງຖິ້ມລະເບີດ.

ນັກບິນໄດ້ວາງແຜນຕາມໜ້າດິນ ແລະຕາມດ້ານການເຄື່ອນໄຫວຂອງຝ່າຍມິຕ ເພື່ອຄວາມປອດພັຍ. ໜອງເປັດ ຕັ້ງຢູ່ໃນຮ່ອມພູແຄບ ບັງດ້ານຕາວັນອອກ ແລະຕາວັນຕົກ ສັດຕຣູຈິ່ງແນ່ນອນວ່າ ນັກບິນຕ້ອງຖິ້ມລະເບີດຕາມຮ່ອມພູ ຄື: ບິນທິສໃຕ້ຫາທິສເໜືອ. ແຕ່ການຖິ້ມລະເບີດໃນຄັ້ງນັ້ນ ນັກບິນບໍ່ໄດ້ບິນສູງ ບິນເໜືອເທິງພູນ້ອຍດຽວ ແລ້ວຖິ້ມລະເບີດ ແລ້ວໄດ້ບິນເຈີດໄປດ້ານທີ່ຕັ້ງຂອງຝ່າຍມິຕ ແລ້ວ ກັບໄປຖິ້ມຢ່າງຕໍ່ເນື່ອງ. ນັກບິນ ວ່າງບີ ເວົ້າວ່າ: “ການຖິ້ມລະເບີດໃນຄັ້ງນັ້ນເຮັດໃຫ້ ສັດຕຣູຕາຍຫລາຍກ່ວາທຸກໆຄັ້ງທີ່ຜ່ານມາ”.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ນັກບິນວ່າງບີ ເປັນນັກບິນທີ່ເກັ່ງ, ກ້າຫາຣຫລາຍທີ່ສຸດ. ນາຍທະຫາຣນີ້ງແລະລາວໄດ້ອົພຍົບ ໜີໄປຫລົ້ພັຍຢູ່ຕ່າງປະເທສເກືອບໝົດທຸກຄົນ. ແຕ່ນັກບິນ ວ່າງບີ ໄດ້ໂດນເຂົ້າປ່າເພື່ອຕໍ່ສູ້ກັບສັດຕຣູ ຄອມມູຍນິສຕ໌ ຕັ້ງແຕ່1975-1984 ຈື່ງໜີຂ້າມໄປປະເທສໄທຍ໌ ແລະ ໄດ້ອົພຍົບໄປຕັ້ງຖິ່ນຖານ ຢູ່ສະຫະຣັຖ, ຍ້ອນສະພາບ ດ້ານການເມືອງປ່ຽນແປງ ແລະຂາດການຊ່ວຍເຫລືອ.

**4 ນັກບິນ ຊີງກົວ** ຫລັງຈາກຮຽນຈົບ ໄດ້ໄປປະຈຳໜ້າທີ່ຢູ່ລ່ອງແຈ້ງ ຫລາຍເດືອນ. ຜູ້ກ່ຽວໄດ້ໄປປະຕິບັດງານຕາມຄຳສັ່ງ ຕອນບິນກັບເຖິງເດີນຍົນລ່ອງແຈ້ງ ເວລາຈະລົງ ໄດ້ຖືກຍົນຕ໌ເຮຣີໂຄບເຕີ (Charly Green) ບິນຜ່ານເດີນຍົນຕ໌ ເຮັດໃຫ້ລົມພັດຍົນຕ໌ ເຕ-28 ຂອງ ຊີງກົວ ອອກນອກເດີ່ນຍົນ ຊີງກົວຈຳເປັນຕ້ອງໄດ້ໂດດຈອ້ງອອກຈາກຍົນຕ໌ ເຕ-28 ຈອ້ງໄດ້ເປີດອອກ ສາຍຈອ້ງໄດ້ຟາດຖືກຕາ ເຮັດໃຫ້ຕາເສັຍໄປຂ້າງໜຶ່ງ ຈື່ງໄດ້ເຊົາຂັບເຄື່ອງບິນ ເຕ-28. ປະຈຸບັນເປັນອົພຍົບຢູ່ຊີກາໂກ ຣັຖອິນລີນອຍ, ສະຫະຣັຖ (Chicago, IL. USA).

**5 ນັກບິນ ມົວຈື້** ຕາມສັງເກດເບິ່ງ ເປັນນັກບິນທີ່ສະລາດ ແລະມີການຕັດສິນໃຈດີ ທັນກັບເຫດການຮັກໝູ່ເພື່ອນນັກບິນດ້ວຍກັນ ເອົາໃຈໃສ່ໜ້າທີ່ ຍິງຖືກເປົ້າໝາຍດີກວ່ານັກບິນສ່ວນຫລາຍ. ມີຕອນນຶ່ງໃນຣະຫວ່າງເດືອນ ສິງຫາ 1972, ກອງພົນ 2 ຕີເຂົ້າທາງລາດແສນ ທາງຕາວັນອອກທົ່ງໄຫຫີນປະມານສາມຊົ່ວໂມງ ກ່ອນ ເຕ-28 ຈະມາເຖິງ ຂ້າພະເຈົ້າໄດ້ເອົາກ້ອງສອ່ງໆເບິ່ງຕາມສັນພູນອ້ຍ ຣະຫວ່າງລາດແສນແລະບ້ານລັນ ເຫັນວ່າສັດຕຣູເຄື່ອນທີ່ໄປມາຢູ່ຕາມສັນພູ ຈື່ງໄດ້ຮອ້ງຂໍໃຫ້ເຄື່ອງບິນໄປຊ່ວຍ. ການບິນໄປຍິງເປົ້າໝາຍເທື່ອນີ້ ມີນັກບິນ ວ່າງບີ, ມົວຈື້ ແລະ ຢາງບີ. ເມື່ອນັກບິນມາເຖິງ ກໍຖາມຫາເປົ້າໝາຍໄດ້ອ່ານແຜນທີ່ໃຫ້ຟັງ ແລະ ບອກຈຸດໃຫ້, ນັກບິນ ວ່າງບີເປັນຜູ້ທີ່ໜຶ່ງ ລົງຖິ້ມລະເບີດສຽງປືນ ປ.ຕ.ອ ຂນາດ 14.6 ມ/ມ, 4 ກະບອກ ດັ່ງສນັ່ນ ຂຶ້ນຫອ້ງຟ້າໃສ່ຍົນຕ໌ ຂອງນັກບິນ ວ່າງບີໆ ໄດ້ເຈີດອອກໄປຫ່າງໆເພື່ອ ວາງແຜນກັບໄປໂຈມຕີໃໝ່, ມົວຈື້ ເອີ້ນບອກ ວ່າງບີ ວ່າ: ໃຫ້ເບິ່ງຊ່ວຍແດ່ວ່າ ບອມຕົກໃກ້ຫລືໄກ ຫລາຍປານໃດ? ມົວຈື້ ໄດ້ເຈີດຂຶ້ນສູ່ງ ປະມານສິບພັນ ກວ່າຫລາ ແລ້ວ ກໍດັກລົງຊື່ໆປະມານ 8 ພັນຫລາ ໄດ້ປ່ອຍລະເບີດທັງໝົດ 6 ລູກ ນ້ຳນັກ 250 ປອນດ໌ (pounds) ລົງໃສ່ປືນ ປ.ຕ.ອ. 2 ກະບອກຈົນມິດໄປ.

ນັກບິນວ່າງບີ ແລະຢາງບີ ກໍໃຊ້ແຜນແບບດຽວກັນ ໃສ່ປືນ ປ.ຕ.ອ. ສອງກະບອກທີ່ຍັງເຫລືອ ແຕ່ສັດຕຣູໄດ້ແຕກໜີກ່ອນ ເພາະພວກເຂົາເຫັນບົດບາດຂອງນັກບິນ ມົວຈື້ ແມ້ນຢຳໂພດສອງກະບອກນັ້ນມູ້ນໝົດ. ຣະເບີດທີ່ຖິ້ມຈາກຍົນຕ໌ຂອງ ວ່າງບີ ແລະ ຢາງບີ ໄດ້ຕົກລົງຕ່ຳ ຈື່ງບໍ່ຖືກປືນ ປ.ຕ.ອ. ຝ່າຍມິຕໄປຍຶດໄດ້ພູ ຈື່ງໄດ້ເອົາປືນສອງກະບອກທີ່ບໍ່ເພ ມາໂຊ ຢູ່ລ່ອງແຈ້ງ ໃຫ້ປະຊາຊົນເບິ່ງ. ຢູ່ຈຸດທີ່ຖິ້ມລະເບີດນີ້ ສັດຕຣູຕາຍ 4 ຄົນ 2 ຄົນ ຖືກຜູກຂາໄວ້ກັບປືນຕາຍຄາປືນໄວ້ ບໍ່ມີໂອກາສຈະໜີໄປໄດ້.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ນັກບິນ ວ່າງບີ, ມົວຈື້ ແລະ ຢາງບີ ໄປຖິ້ມລະເບີດເທື່ອນີ້ແມ່ນ ສາມອາທິດກ່ອນ ນັກບິນ ວ່າງສີ ຖືກຍິງຕົກແລະເສັຍຊີວິດ.

ໃນປີ 1973, ນັກບິນມົວຈື້ ໄດ້ຖືກຍິງ ດວ້ຍປືນ 12.8 ມ/ມ ຂອງສັດຕຣູໄກ້ ໆເທິງພູໝອກ Skyline II ທາງທິສເໜືອຂອງລ່ອງແຈ້ງ ຍົນຕ໌ເກີດໄຟໄໝ້ ໄດ້ໂດດຈອ້ງລົງ ພໍຈອ້ງພົ້ນ ຕີນມົວຈື້ ກໍຈຸດີນ. ເຫຕການນີ້ ໄດ້ເກີດຂຶ້ນປະມານສາມອາທິຕຍ໌ ກ່ອນນັກບິນ ວ່າງບີ ຖືກຍິງຢູ່ເມືອງໝອກ ດັ່ງນັ້ນ ທ່ານນາຍພົນວ່າງປາວ ຈຶ່ງໄດ້ຈັດພິທີສູ່ຂວັນໃຫ້ທັງສອງຄົນພ້ອມກັນຢູ່ລ່ອງແຈ້ງ. ນັກບິນ ມົວຈື້ໄດ້ອົພະຍົບໄປຢູ່ປະເທສຝຣັ່ງເສສ ປີ 1976 ດ້ວຍການຕອ້ນຮັບຈາກ ນ້າບ່າວ (ອ້າຍຂອງເມັຍ) ທີ່ໄດ້ໄປຮຽນຢູ່ປະເທສຝຣັ່ງເສສ ຫລາຍປີກອ່ນການສູນເສັຍບ້ານເມືອງໃຫ້ຄອມມຸຍນິສຕ໌. ນັກບິນ ມົວຈື້ໄດ້ເສັຍຊີວິດທີ່ນັ້ນໃນປີ 2000 ດ້ວຍຄວາມໂສກເສົ້າ, ຄິດເຖິງເພື່ອນຝູງ ແລະ ບ້ານເມືອງ.

**6 ລີຕຸຊົ້ງ** ຫລື ນັກບິນຄົນເຈົ້າຊູ້ ແລະ ນັກຂີ້ໂມ້ ແບບຕະລົກ ໜ້າຫົວເຣາະ ຍິງເປົ້າໝາຍດ້ວຍເຄື່ອງບິນ ເຕ-28 ບໍ່ຖືກດີເທົ່າໃດ ແຕ່ບິນຂຶ້ນແລະລົງເດັ່ນໄດ້ດີຫລາຍ. ຜູ້ກູ່ງວບິນ ເຕ -28 ໄດ້ປະມານ 2 ປີ ກໍໄດ້ຮັບຄຳສັ່ງຈາກທ່ານນາຍພົລຕຣີ ວ່າງປາວ ໃຫ້ໄປຂັບເຄື່ອງບິນຊີ້ເປົ້າໝາຍ ເພື່ອຄວາມສະດວກຂອງການຕິດຕໍ່ກັບກຳລັງເຄື່ອນທີ່ຂອງຝ່າຍມິຕ. ລີຕຸຊົ້ງ ແລະ ຢາງຊົ່ງ ໄດ້ມາບິນເຄື່ອງບິນຊີ້ເປົ້າໝາຍ ຊ່ວຍ ກຳລັງຝ່າຍມິຕໄດ້ຜົລດີທີ່ສຸດ.

ມີຕອນນຶ່ງ ຂ້າພະເຈົ້າໄດ້ໄປຕອ້ນເອົາ ພ.ທ. ວ່າງຢົວ ທີ່ຖືກບາດເຈັບຢູ່ໃນສນາມຮົບ ຖືກສະເກດປືນໃຫ່ຍ ຂອງສັດຕຣູຖືກທີ່ຂາ ຍ່າງບໍ່ໄດ້ ສັດຕຣູໄດ້ລອ້ມໄວ້ ມີທາງດຽວຄື ເອົາຍົນຕ໌ເຮລີໂຄບເຕີ ໄປເອົາ ນັກບິນຢ່າງ ຊົ່ງ ຈຶ່ງຮອ້ງຂໍໃຫ້ໄປຊ່ວຍເອົາອອກ ແມ່ນຢູ່ບ້ານລັນໄກ້ໆລາດແສນເດືອນ ພຶດສະພາ (May) ປີ 1972. ນັກບິນຢາງຊົ່ງ ເປັນຜູ້ຂັບເຄື່ອງບິນຊີ້ເປົ້າໝາຍ ແລະ ເປັນຜູ້ຕິດຕໍ່ ພ.ທ ວ່າງຢົວ. ຂ້າພະເຈົ້າ ໄດ້ເອີ້ນນັກບິນເຮລີໂຄບເຕີ 34 ຂັບໂດຍນັກບິນ HT34 ຊື່ ທ້າວສີສວັນ ວົງນະພອນ ພ້ອມຜູ້ຊ່ວຍ. ເມື່ອນັກບິນມາເຖິງ ຂ້າພະເຈົ້າໄດ້ໃຫ້ຜູ້ຊ່ວຍນັກບິນລົງ ແລ້ວຂ້າພະເຈົ້າຂຶ້ນໄປນັ່ງແທນ ເມື່ອບິນໄປເຖິງຈຸດ ໄດ້ບອກໃຫ້ນັກບິນ ຢາງຊົ່ງ ຍິງລູກຄວັນ ໃສ່ຫ່າງຈາກບ່ອນທີ່ ພ.ທ ວ່າງຢົວ ນອນຢູ່ປະມານໜຶ່ງໄມລ໌ ແລ້ວໃຫ້ບອກທິສທາງວ່າຢູ່ຫ່າງ ຈາກລູກຄວັນ ໄປທິສໃດ? ຢາງຊົ່ງ ໄດ້ຍິງລູກຄວັນ ແລະກໍບອກວ່າ ຫ່າງຈາກລູກຄວັນໄປທາງຕາວັນອອກຊື່ງ ມີຕົ້ນໄມ້ນ້ອຍ ສີ່ຕົ້ນນຳກັນ ມີ.ພ.ທ. ວ່າງຢົວ ຫລານຊາຍເປັນຜູ້ເຝົ້າຮັກສາຢູ່ນຳ.

ຂ້າພະເຈົ້າໄດ້ບອກໃຫ້ນັກບິນ ສີສວັນ ວົງນະພອນ ບິນຂຶ້ນສູງເຕີບກ້າວ່າປືນນ້ອຍຂອງສັດຕຣູຍິງບໍ່ເຖິງແລ້ວ ຢຸດຈົ້ງຈອບເບິ່ງຢູ່ຫ່າງໆແລ້ວ ກໍໄດ້ບິນໄປໄກ້ໆ ຈຶ່ງຄ່ອຍໆຮ່ອນລົງໄປເອົາ ພ.ທ. ວ່າງຢົວ ແລະຫລານຊາຍ ແລ້ວກໍພຍາຍາມເຈີດຂຶ້ນສູງປະມານພັນກວ່າຫລາ ສັດຕຣູໄດ້ຮວດປືນໃສ່ຍົນຕ໌ ດັງສະ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ປັ່ນຫວັ່ນໄຫວ ຈົນຫູໜວກ ນັກບິນສີສວັນ ໜ້າດຳໝົດແລ້ວ ເວົ້າວ່າ: "*ນາຍ! ເຄື່ອງບິນຕ້ອງຖືກລູກປືນ ຫລາຍລູກແລ້ວ*! ຂ້າພະເຈົ້າຕອບວ່າ: " *ບໍ່ຕ້ອງຢ້ານ ພະຜູ້ເປັນເຈົ້າຄູ້ມຄອງພວກເຮົາຢູ່ ! ອາດບໍ່ຖືກກໍ ໄດ້!*" ເມື່ອກັບຄືນເຖິງຈຸດແລ້ວ ສີສວັນ ໄດ້ລົງໄປກວດເບິ່ງເຄື່ອງບິນ ບໍ່ເຫັນມີຮອຍລູກປືນຖືກຍົນຕ໌ເລີຍ. ດັ່ງນັ້ນ ນັກບິນ ສີສວັນ ວົງ ນະພອນ ຈຶ່ງເວົ້າວ່າ: "*ເປັນຕາໜ້າງຶດແທ້ໆເດີ້ນາຍ!*" ສີສວັນ ວົງນະພອນ ໄດ້ອົພະຍົບໄປຕັ້ງຖິ່ນຖານຢູ່ເມືອງແອນຢີນ ຣັດອີນລີນອຍ, ສະຫະຣັຖ (Elgin, IL. USA.) ໄດ້ເສັຍຊີວິດ ດ້ວຍພະຍາດ ຂອງຜູ້ກ່ຽວ ປີ 2001. ພັລະຍາຊື່ ນາງບຸນເຮືອງ ວົງນະພອນ.

ການໄປຕອັນເອົາ ພ.ທ ວ່າງຢົວ ເທື່ອນີ້ແມ່ນສ່ຽງແທ້ໆ ຍ້ອນຄວາມຮັກແລະການຮັບຜິດຊອບ ໜ້າທີ່ການ ຕ້ອງຊ່ວຍນັກຕໍ່ສູ້ຂອງຕົນ ແລະມີຄວາມເຊື່ອແນ່ວ່າ ການປ້ອງ ກັນທາງອາກາສ ຂອງນັກບິນ ຢາງຊົງ ຈະ ປອ້ງກັນໄດ້ ຫາກເມື່ອໃດສັດຕຣູຍິງ ປ.ຕ.ອ. ໃສ່ ເຮລີໂຄບເຕີ, ຢາງຊົງ ຈະຕ້ອງຍິງຈຣວດລູກສັງຫາຣໄປ ໃສ່ ສັດຕຣູ ທັນໃດ. ດ້ວຍເຫຕນີ້ ຈຶ່ງກ້າສ່ຽງໄປຮັບເອົາຄົນບາດເຈັບຢູ່ໃນສນາມຮົບ.

ພ.ທ. ວ່າງຢົວ ຖືກບາດເຈັບຕາມເຫຕການດັ່ງຕໍ່ໄປນີ້: ສັດຕຣູໄດ້ເຂົ້າໂຈມຕີ ກຣົມ 23 ຂອງ ພ.ທ. ວ່າງ ຢົວ ຢ່າງເປັນໜ້າກະດານ ໂດຍການສນັບສນຸນຈາກ ຣົຖຖັງ, ຣົຖຫຸ້ມເກາະ ແລະ ປືນໃຫ່ຍ ສະເກັດປືນ ໃຫ່ຍໄດ້ຖືກຂາຂອງ ພ.ທ. ວ່າງຢົວ ຈຶ່ງຍ່າງບໍ່ໄດ້ ຍັງເຫລືອຫລານຊາຍຜູ້ດຽວຄູ້ມກັນໄວ້ ນອກນັ້ນ ແມ່ນ ໄດ້ແຕກອອກຈາກກັນໄປ ຊ່ວຍຫັຍງກັນກໍ່ບໍ່ໄດ້. ທັງສອງ ຈຶ່ງໄດ້ສູ້ຕາຍກັບທີ່ ໄດ້ຍິງສັດຕຣູຕາຍຄາທີ່ ຫລາຍສິບ. ຂ້າພະເຈົ້າໄດ້ຫລຽວເຫັນໄປຈາກເຄື່ອງບິນ ຕອນຍົນຕ໌ເຮລີໂຄບເຕີລົງ ແລະ ຢູ່ໄກ້ໆບ່ອນ ຍົນຕ໌ລົງ.ໂຊກດີ ທອ້ງຟ້າໄດ້ແຈ້ງ ຂຶ້ນຍົນຕ໌ໄດ້ໄປຊວ່ນທັນ ສັດຕຣູຢ້ານຍົນຕ໌ຍິງ ຈຶ່ງໄປລີ້ ບໍ່ກ້າ ອອກມາ ບຸກເອົາ ພ.ທວ່າງຢົວ ແລະຫລານຊາຍ ພໍຍົນຕ໌ໄປຮອດເດີ່ນ ພຽງແຕ່ລົງຈາກຍົນຕ໌ເທົ່ານັ້ນ ຫລານຊາຍ ຂອງວ່າງຢົວ ກໍແລ່ນມາຂອບໃຈແລະຮອ້ງໄຫ້ ທັງຢ້ານ ທັງ ດີໃຈ ທີ່ເອົາຊີວິດລອດມາໄດ້.

ນັກບິນ ລີຕຸຊົ້ງ ແລະ ຢ່າງຊົງ ໄດ້ຂັບເຄື່ອງບິນ 01 ຊີ້ເປົ້າໝາຍ ທີ່ຂ້າພະເຈົ້າຈຳໄດ້ວ່າຕອນເວລາ ຫົກໂມງເຊົ້າ ສັດຕຣູ ບໍ່ຢ້ານຫັຍງ ແລ່ນຣົຖຖັງ ຢູ່ກາງເດີ່ນລາດແສນ ແບບຂູ່ຝ່າຍມິຕ ແຕ່ພໍເຫັນເຄື່ອງບິນ ພົ້ນທອ້ງຟ້າ ພວກສັດຕຣູທີ່ຂັບຣົຖຖັງຢູ່ເດີນລາດແສນນັ້ນ ໄດ້ພາກັນໂຕນໜີ ປະຣົຖຖັງໄວ້ກອ້ງຕົ້ນໄມ້ ແທນທີ່ ລີຕຸຊົ້ງ ຈະຍິງຣົຖຖັງ ກັບໄປໄລ່ຍິງພວກສັດຕຣູ ທີ່ແລ່ນຢູ່ກາງເດີ່ນ ດ້ວຍລູກຈະຣວດສັງຫາຣ ເພາະມັນແປນແລະເຫັນຄົນແລ່ນຢ່າງດີ. ບາງຄົນກໍແລ່ນ ບາງຄົນກໍລົ້ມລົງ ປ່ອຍໃຫ້ຍົນຕ໌ຍິງ. ຂ້າພະ ເຈົ້າໄດ້ເອົາກ້ອງສ່ອງເບິ່ງ ເຫັນວ່າ ລີຕຸຊົ້ງ ຍິງໄດ້ແມ້ນຍຳ ແລະ ພາໃຫ້ສັດຕຣູ ຕາຍຫລາຍຄົນ. ຍ້ອນຣົຖ ຖັງ ທີ່ປະໄວ້ນີ້ ທ່ານນາຍພົນ ວ່າງປາວ ຈຶ່ງໄດ້ສັ່ງໃຫ້ນັກບິນ ວ່າງສີ ມາຊ້ຳເຕີມໃຫ້ເພ ແຕ່ໂຊຄບໍ່ເຂົ້າຂ້າງ ຕ້ອງເສັຍນັກບິນ ວ່າງສີ ໄປ. ຝ່າຍມິຕໄດ້ເຂົ້າໄປຍຶດພື້ນທີ່ຮອດຈຸດທີ່ນັກບິນ ລີຕູ້ຊົ້ງ ຍິງພວກສັດຕຣູ ຂັບ ຣົຖຖັງ ເຫັນແຕ່ຣົຖຖັງເພ ມີຮອຍເລືອດຢາຍໄປທົ່ວ ສັ່ງເກດໄດ້ວ່າໃນຄ່ຳຄືນນັ້ນ ພວກສັດຕຣູ ຄົງເຂົ້າໄປ ເກັບເອົາຊາກສົພ ຄົນຕາຍໜີໝົດ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1973, ນັກບິນ ລີຕຸຊີ້ງ ໄດ້ເຊົາຂັບເຄື່ອງບິນຊີ້ເປົ້າໝາຍ ໄດ້ປ່ຽນໄປຂັບເຄື່ອງບິນນ້ອຍແບບແຊສ ສະນາ ໝາກປີ່ນດຽວ ປະຈຳທ່ານນາຍ ພົລ ວ່າງປາວ. ລີຕຸຊີ້ງ ໄດ້ເສັຍຊີວິດຍ້ອນຂັບເຄື່ອງບິນນີ້ ໄປຕຳພູ ຢູ່ບ້ານນ້ຳຍອນ. ລີຕຸຊີ້ງ ເສັຍຊີວິດ ພ້ອມກັບ ວ່າງຈີງ ນັກບິນ ເຣລີໂຄບເຕີ. ການຕາຍເທື່ອນີ້ແມ່ນ ບິນມາ ຈາກນ້ຳແຟນ (LS223) ໃນເດືອນ ທັນວາ (December) ປີ 1973 ເພາະບິນບຸກເພື້ອມືດປົກ ເກືອບຈຳໜ້າດິນ ຍັງມີຊ່ອງຫວ່າງເຫັນແຈ້ງ ປະມານ 500 ຟີຕ ຈາກພື້ນດິນ ຫາເພື້ອປົກຫຸ້ມ ຈຶ່ງພາໃຫ້ ນັກບິນ ລີຕຸຊີ້ງ ພະຍາຍາມບິນຕ່ຳ ໄປຕາມບ່ອນແຈ້ງ ລຽບໄປຕາມພູ ແຕ່ໂຊກບໍ່ເຂົ້າຂ້າງ ຫາງຍົນໄດ້ ໄປເກາະຕົ້ນໄມ້ໄຜ່ ທີ່ຜູ້ກ່ຽວຈະຫລີກ ແຕ່ຫລີກບໍ່ພົ້ນ ພາໃຫ້ຕົກ ເສັຍຊີວິດຕອນປະມານ 8 ໂມງເຊົ້າ.

7 **ນັກບິນ ຢາງບີ,** ເປັນນັກບິນຮູບຮ່າງຕ່ຳເຕັ້ຍ ມີຄວາມສລາດ ມີຝີມືດີ ໃນການຍິງປືນຈາກຍົນຕ໌ ແລະ ປືນນ້ອຍຂັດແອວ. ຜູ້ກ່ຽວໄດ້ອົພະຍົບໄປຢູ່ເມືອງ ຊັນດີອາໂກ ຣັຖກາລີຟອກເນັຍ, ສະຫະຣັຖ.

8 **ນັກບິນຢາງປາວ** ຖືກ ປ.ຕ.ອ. ຍິງຕົກຢູ່ນ້ຳແສນທາງຕາວັນຕົກສຽງເໜືອຂອງພູຜາໄຊຍ໌ ໃນວັນທີ່ 2 ເດືອນມິຖຸນາ (June) 1972 ໄດ້ໂດດຈອ້ງລົງ ແລະຖືກສັດຕຣູຈັບໄປເປັນສະເລີຍເສິກ. ໃນປີ 1978, ນັກບິນ ວ່າງບີ ໄດ້ໄປລັກເອົາອອກມາ. ຜູ້ກ່ຽວໄດ້ອົພະຍົບໄປຢູ່ຣັຖ ກາລີຟອກເນັຍ ສະຫະຣັຖ.

9 **ນັກບິນ ວ່າງເຊັ້ງຄ້າມີ** ໄດ້ໄປຖິ້ມລະເບີດໃສ່ສັດຕຣູສອງຄັ້ງ ເສັຍຂວັນທີ່ໄດ້ເຫັນ ປ.ຕ.ອ. ຂອງ ສັດຕຣູຫລາຍໂພດ. ຜູ້ກ່ຽວໄດ້ເຈັບປ່ວຍນອນຢູ່ໃນຫອ້ງ, ທ່ານໝໍ ໄດ້ໄປກວດເບິ່ງສຸຂພາບ ເຫັນວ່າຜູ້ກ່ຽວ ມີອາການທັມະດາ ດັ່ງນັ້ນ ນາຍພົລຕຣີ ວ່າງປາວ ໄດ້ສັ່ງໃຫ້ກັບບ້ານ ຕໍ່ຈາກນັ້ນບໍ່ຮູ້ຂ່າວຜູ້ກ່ຽວອີກເລີຍ.

10 **ນັກບິນ ບູນຈັນ** ເປັນເຜົ່າລາວເທິງ ຄົນທຳອິດ ໄດ້ບິນໄປປະຕິບັດໜ້າທີ່ ໄດ້ຖືກ ປ.ຕ.ອ. ຍິງ ໃນ ວັນທີ່ 23 ມິຖຸນາ (June) ປີ 1972 ຢູ່ບ້ານຫີນຕັ້ງ (LS74 ) ຢູ່ຕໍ່ໜ້າຂອງຝ່າຍມິດ ຈຶ່ງລອດມາໄດ້. ຜູ້ກ່ຽວ ໄດ້ ອົພະຍົບໄປຢູ່ ຣັຖກາລີຟອກເນັຍ ສະຫະຣັຖ. ເຜົ່າລາວເທິງ ມີຫລາຍຄົນໄດ້ເສັງໄປຮຽນນັກບິນ ແຕ່ບໍ່ ຜ່ານ ເພາະຂາດຄວາມຮູ້ໃນດ້ານພາສາອັງກິສ.

11 **ນັກບິນ ຊໍທ່າວ** ເປັນລູກຝາແຝດກັບ**ເຢັ່ຍທ່າວ** ເມື່ອເຢັ່ຍທ່າວ ອາ້ຍຂອງຕົນຖືກຍິງຕົກເສັຍຊີວິດ ຈຶ່ງແຄ້ນໃຈໃຫ້ ສັດຕຣູ ໄດ້ໄປປະຕິບັດໜ້າທີ່ ໃນວັນທີ່ 3 ເດືອນເມສາ (April) ປີ 1972 ໄດ້ຫາຍສາບສູນ ໄປຢ່າງບໍ່ຮູ້ຮ່ອງຮອຍເລີຍ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ນັກບິນຣຸ່ນທີ່ 4

1- **ນັກບິນ ວ່າງຕູ້** ໄດ້ຮຽນຈົບໃນທ້າຍປີຢຈຄຟ ໄດ້ໄປບິນບໍ່ດົນເທົ່າໃດ ຜູ້ກ່ຽວໄດ້ຂັບເຄື່ອງບິນລົງເດີນລອ່ງແຈ້ງ ແຕ່ລົງກົນເດີ່ນຫລາຍໂພດ ເດີ່ນສັ້ນ ຫ້າມເບຣກບໍ່ຢູ່ ເຮືອບິນແລ່ນໄປຕໍາສາງເຄື່ອງ, (ແມ່ນບ່ອນດຽວທີ່ນັກບິນວາງເດົ້າໄດ້ຕໍາຕາຍ) ຖືກໜ້າ ແລະດັງແຕກ ນັກບິນວ່າງຕູ້ ຈື່ງໄດ້ເຊົາຂັບຍົນຕ໌. ຜູ້ກ່ຽວໄດ້ອົພະຍົບໄປຢູ່ເມືອງມົງກີລິດ ຣັຖນອສໄກໂຣໄລນາ,ສະຫາຣັຖ (Mount Gilead, N.C, USA).

2- **ນັກບິນ ວ່າງເຕົ້ງ** ຈົບຈາກການຮຽນແລ້ວ ໄດ້ໄປປະຕິບັຕໜ້າທີ່ບໍ່ພໍເທົ່າໃດ. ໃນປີ 1973 ສະຫະຣັຖ ແລະວຽດນາມໄດ້ເຊັນສັນຍາຢຸດຕິສົງຄາມ. ຕໍ່ຈາກນັ້ນ ນັກບິນທຸກຄົນກໍບໍ່ຄ່ອຍໄດ້ບິນໄປປະຕິບັຕໜ້າທີ່. ແຕ່ໃນທ້າຍປີ 1973 ສັດຕູ ຄອມມຸຍນິສຕ໌ ໄດ້ລະເມີດເຂຕ ປັກລັກຂອງຝ່າບມິຕ ຄວາມຕືງຄຽດໄດ້ເກີດຂື້ນໃໝ່ ທ່ານນາຍພົລຕຣີ ວ່າງປາວໄດ້ອອກຄໍາສັ່ງໃຫ້ ນັກບິນຣູ່ນເກົ່າ ແລະ ຣູ່ນໃໝ່ ຕຽມພ້ອມ ໄດ້ໄປຖີ້ມລະເບີດໃສ່ຫລາຍຈຸດ ຊ່ວຍຝ່າຍມິຕ ເຊັ່ນ: ບວມຫລົງ, ສະລາພູຄູນ, ຫີນຕັ້ງ, ບ້ານນາ, ແລະ ເມືອງໜອກ. ວ່າງເຕົ້ງ ໄດ້ອົພະຍົບໄປຢູ່ເມືອງແຊງໂປນ ຣັຖມິເນໂຊຕາ ສະຫະຣັຖ ໃນເວລາຂຽນປວັດນີ້ ແມ່ນປີ 2010 ວ່າງເຕົ້ງ ມີສຸຂພາບບໍ່ແຂງແຮງ ຍ້ອນໂລກຫົວໃຈ.

3- **ນັກບິນ ລີຢາ** ອົພະຍົບໄປຢູ່ຣັຖ ມິສຊີຊີປີ, ໃນສະຫະຣັຖ.
4- **ນັກບິນ ຢາງພົງ** ອົພະຍົບໄປຢູ່ເມືອງແຊງໂພນ, ຣັຖມິເນໂຊຕາ, ສະຫາຣັຖ.
5- **ນັກບິນ ລີມົວ** ໄດ້ອົພະຍົບໄປຢູ່ ຣັຖມິຊິແກນ, ສະຫະຣັຖ ອາເມຣິກາ

## ນັກບິນຣຸ່ນທີ່ 5 ຣຸ່ນສຸດທ້າຍ

1- **ວ່າງຟົ້ວ** ໄດ້ອົພຍົບໄປຢູ່ ຣັຖຢອກເຢັຍ (Georgia, USA), ສະຫະຣັຖອາເມຣິກາ

2- **ນັກບິນ ມົວຊົວ** ຢູ່ຣັຖກາລີຟອກເນັຍ, ສະຫະຣັຖອາເມຣິກາ

3- **ນັກບິນຢາງເຢ້ ຫລື ໜາວບີ ຢາງ (ຊື່ ຫລີ້ນແມ່ນ ເຈີຖາ )** ໄດ້ອົພະຍົບໄປຢູ່ສະຫະຣັຖອາເມຣິກາ.

4- **ນັກບິນ ເຢັຍຄ້າ** ອົພະຍົບໄປຢູ່ (Narvon, PA USA)

<u>**ນັກບິນ** ທີ່ຮຽນຂັບເຄື່ອງບິນ **ເຮລີໂຄບເຕີ** (HT34) </u>ມີ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

1. **ນັກບິນ ວ່າງບີ** ຮຽນອອກແລ້ວໄດ້ມາຂັບເຄື່ອງບິນບໍ່ດົນກໍໄດ້ອົພຍົບໄປຢູ່ ຣັຖກາລີຟອກເນັຍ ສະຫະຣັຖ ຜູ້ກ່ຽວໄດ້ເສັຍຊີວິດຍ້ອນພະຍາດຂອງຜູ້ກ່ຽວໃນປີ 1994 ໃນຣັຖ ກາລີໂຟເນັຍ.
2. **ນັກບິນ ວ່າງຄ້າ** ໄດ້ອົພຍົບໄປຢູ່ (Denver, PA , USA) (ຮູບ# 95)
3. **ນັກບິນ ວ່າງຈົ່ງ** ຮຽນຈົບອອກບໍ່ດົນຜູ້ກ່ຽວໄດ້ນັ່ງເຄື່ອງບິນ (Cessna) ນຳນັກບິນ ລີຕຸຊີ້ງໄດ້ເສັຍຊີວິດຍ້ອນໄປຢາມນ້ຳແຟນ (LS223) ຂາກັບໄປລ່ອງແຈ້ງ, ເຄື່ອງບິນອັນຕະລາຍເສັຍຊີວິດທັງສອງຄົນ ໃນເດືອນທັນວາ (December) ປີ 1973.



*ຮູບທີ່ 100. ນີ້ແມ່ນ ຍົນຂົນອາວຸດແລະເຄື່ອງພັກ ຂອງທະຫານ ຄື ປີນໃຫ່ຍ ແລະ ຣົຖຍົນຕ໌*




*ຮູບທີ່ 101. ນັກບິນ ເຮລິໂຄບເຕີ ພ.ຕ. ວ່າງຄ້າ 1973*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ນັກບິນ** ທີ່ຮຽນຂັບເຄື່ອງບິນ **ດາໂກຕາ** C47ມີ

1. **ນັກບິນ ຊົງກູ້** ໄດ້ຂັບເຄື່ອງບິນສົ່ງເຄື່ອງໄປລ່ອງແຈ້ງ, ກັບນັກບິນມົວວາ ເຄື່ອງບິນຕົກ ໄດ້ເສັຽຊີວິດ.
2. **ນັກບິນ ມົວວາ** ໄດ້ຂັບເຄື່ອງບິນດາໂກຕາ ເສັຍຊີວິດປະມານໃນປີ 1970 ພ້ອມກັບນັກບິນຊົງກູ້ ເພາະ ຕຳພູໃຕ້ເດີ່ນຍົນລ່ອງແຈ້ງ. ໃນປີ 1973, ນັກບິນ ເຕ-28 **ລີເຕັງ, ແລະ ມົວຈື້** ໄດ້ໄປຮຽນຂັບຍົນ C47 ຈົບ ກັບໄປຮອດລ່ອງແຈ້ງ ໄດ້ໄປປະຕິບັດວຽກການບິນບໍ່ດົນ ກໍໄດ້ອົພຍົບ, ມົວຈື້ ເສັຍຊີວິດຢູ່ຝຣັ່ງ. ລີເຕັງ ອົພຍົບ ໄປຢູ່ສະຫະຣັຖອາເມຣິກາ.

**ນາຍຊ່າງແປງຍົນ**

ມີ: **ລໍເຢ້, ມົວຊົ້ງ, ລີຢົ້ງ. ແລະ ຊົງເຊົ້ງ**

ໃນປີ 1972, ເປັນຕົ້ນມາແມ່ນ ພັນອາກາສ**ຕຣີ ຢາງຊົງ** ເປັນຜູ້ບັນຊາການຝູງບິນພາຄສອງ, ມີນາມວ່າ ຝູງບິນເຈົ້າຜາຂາວ. ເຈົ້າ**ຜາ**ຂາວ ມີສອງຝູງ ມີຊື່ ຝູງບິນເຈົ້າຜາຂາວ ເຫລືອງ, ແລະຝູງບິນເຈົ້າຜາຂາວ ຂຽວ. ແຕ່ລະຝູງມີຍົນຕ໌ເຕ-28 ສາມຫາສີ່ລຳ ນັກບິນພາຄອື່ນໆໄດ້ໄປຊ່ວຍສັບປ່ຽນການບິນຊ່ວຍຖິ້ມລະເບີດໃສ່ສັດຕຣູ.

ມີນັກບິນລາວພາຄອື່ນ ຫລາຍຄົນຖືກຍິງຕົກ, ແລະເສັຍຊີວິດ ບາງຄັ້ງກໍແມ່ນຕຳພູ ຍ້ອນດິນຟ້າອາກາສມີເຝື້ອໜາ ເບິ່ງບໍ່ເຫັນໄກ, ຢູ່ໃນພາຄສອງອາກາສບໍ່ປົກກະຕິ, ຫົວພູກໍສູງກ່ວາຢູ່ພາຄອື່ນໆໃນຣາຊອານາຈັກລາວ. ຂ້າພະເຈົ້າຈຳໄດ້ວ່າ ມີນັກບິນ ເຕ-28 ພີ່ນ້ອງລາວພາຄ 1 ໄດ້ໄປພັກເຊົາຢູ່ເຮືອນຫລັງດຽວກັນ ໄດ້ຂັບເຄື່ອງບິນໄປຖິ້ມລະເບີດໃສ່ສັດຕຣູ, ເວລາປະມານ 9 ໂມງເຊົ້າ, ຕອນຂາ ກັບນັກບິນໄດ້ຂັບຍົນຕ໌ລົງຕ່ຳ ໄດ້ຕຳພູຢູ່ໃກ້ໆລ່ອງແຈ້ງ ເສັຍຊີວິດ ຕົນຕົວມູ່ນໝົດ ເກັບໄດ້ແຕ່ເປັນຖົງ ບໍ່ຮູ້ຮອດຕົນຕົວ ນັກບິນມີຊື່ວ່າ ທ້າວຄຳພັດ ແມ່ນພີ່ນ້ອງລາວແຂວງໄຊຍະບູຣີ. ນອກຈາກນີ້ຍັງມີອີກ ສາມຫລືສີ່ຄົນຖືກສັດຕຣູຍິງຕົກຢູ່ສນາມລົບແນວໜ້າ.

ຕາມທີ່ສັງເກຕເຫັນມານັ້ນ ນັກບິນເຜົ່າລາວແລະເຜົ່າລາວສູງ (ມົ້ງ) ທຸກຄົນໄດ້ປະຕິບັຕໜ້າທີ່ຢ່າງກ້າຫານ, ເດັດດ່ຽວ, ຮັກຊາຕ, ຮັກບ້ານເມືອງ, ຮັກແລະເອັນດູພີ່ນ້ອງຮ່ວມຊາຕນຳກັນ ຢູ່ທຸກມຸມທຸກແຈໃນຜືນແຜນດິນລາວ ທີ່ຕໍ່ສູ້ຮ່ວມກັນ ເພື່ອປ້ອງກັນເອກຣາຊຂອງຊາຕ. ຈຶ່ງສົມຄວນເຫັນວ່າ ລາວເຮົາທຸກຄົນຕ້ອງສັນລະເສີນ ເຊີດຊູກຽຕແລະຈາລຶກຄຸນງານຄວາມດີ ຍໍຍົກການເສັຍສລະ ຂອງບັນດານັກ ບິນວີຣະ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ບຸຣຸສເຫລົ່ານີ້ໄວ້ສູງ ເພື່ອໃຫ້ຕິດໄວ້ໃນໃຈຂອງພວກເຮົາຕລອດໄປ ແລະສລັກໄວ້ ໃນປຣະວັຕສາຕຣ໌ຂອງຊາຕລາວເຮົາຈົນ ຮອດລູ້ນລຸກ ລູ້ນຫລານຕລອດກາລນານ.

## ທີມເຣເວນ (Team Ravens)

ຮຸ່ນທີ່ໜຶ່ງມີຄື: ມົວຈື້ , ຢາງຊົງ , ວ່າງຈູ, ແສງພື້ງ ແມ່ນຜູ້ນັ່ງຕັ່ງຫລັງ ຂອງນັກບິນອາເມຣິກາ (Back Seater) ມີຫລາຍຄົນຍົນຕ໌ນີ້ເອີ້ນວ່າເຣເວນ (Raven) ເປັນຍົນຕ໌ບິນເທິງອາກາສຊີ້ເປົ້າໝາຍ. ໜ້າທີ່ແມ່ນຊອກຄົ້ນຫາ ເປົ້າໝາຍ ຄືປືນໃຫ່ຍ, ຣົຖຖັງ ຂອງສັດຕຣູ ແລະ ການເຄື່ອນໄຫວຂອງສັດຕຣູ. ຄົນນັ່ງທັງຫລັງເປັນຜູ້ແປພາສາໃຫ້ນັກບິນສະຫະຣັຖ ເພື່ອຄວາມແນ່ນອນ ຢ່າພາດບໍ່ໃຫ້ຍົນຕ໌ຍິງຝ່າຍມິຕ. ມີຫລາຍຄົນໄດ້ບິນກັບຍົນຕ໌ ຊີ້ເປົ້າໝາຍ 01 ແຕ່ບໍ່ຈຳຊື່ໄດ້ໝົດທຸກຄົນ, ຈຳໄດ້ແຕ່: ຢາງເຮີ ຖືກຍິງຕົກຢູ່ຊຽງຂວາງ ປີ 1968. ນອກນັ້ນ ມີ ລີມົວ, ເຈັ່ຍວາຊົງ, ລີນູ, ພ້າຄີ (Phab Qig), ທວາເຢີເຈັງ (Vam Ntxawg Tsheej). ໜ້າຂອງທ່ານມີແປ້ວບັກໃຫ່ຍ ມາຈາກຖືກບາດເຈັບ ຍ້ອນໄດ້ນຳຍົນຕ໌ ເຣເວນມາລົງເມືອງສຸຍ (LS108) ດ້ວຍຕົນ (ຫລາຍຄົນ ຊາວອາເມຣິກາທີ່ມາປະຕິບັຕໜ້າທີ່ຢູ່ພາຄ 2 ເອີ້ນທ່ານ ທວາເຢີ ວ່າ ທ່ານແປ້ວ (Mr. Scar) ເພາະ ນັກບິນ ອາເມຣິກາ ຖືກຍິງເສັຍຊີວິດຄາຍົນຕ໌ຢູ່ເທິງອາກາສ ທວາເຢີໄດ້ພຍາຍາມນຳຍົນຕ໌ ມາລົງ ແຕ່ລົງບໍ່ຖືກເດີນ ຍົນຕ໌ຂ້ວມ ພາໃຫ້ບາດເຈັບ ເສັຍແອວ ແລະຖືກໜ້າຜາກ ໜ້າຈື່ງເປັນແປ້ວບັກໃຫ່ຽໄວ້. ທ່ານ ທວາເຢີເຈັງ ໄດ້ເສັຍຊີວິດຢູ່ລາວ ແລະ ບໍ່ໄດ້ອົພະຍົບ ເພາະເປັນເຈັບ ຍ້ອນຍົນຕ໌ ຕົກແອວເສັຍຈື່ງໜີບໍ່ໄດ້.

ລໍໄທ ເວລາໄປປະຕິບັດໜ້າທີ່ ໄດ້ຖືກ ປ.ຕ.ອ. ຂອງສັດຕຣູຍິງ ຢູ່ເທິງອາກາສໃນທົ່ງໃຫຫີນ ຖືກໜ້າ ຜາກເຈັບໜັກ. ໂຊກດີ ໂຮງພຍາບາລຂອງສະຫະຣັຖໄດ້ຊ່ວຍ. ລໍໄທໄດ້ອົພະຍົບໄປຢູ່ຣັດນອສໄຄໂຣໄລນາ, ສະຫະຣັຖ.

ຝູງນັກບິນເຣເວນ ສະຫະຣັຖປະຈຳຢູ່ລາວ ມີເຣເວນ 20, 21, 22, 23, 24, 25, 26, 27 ແລະ 28 ແມ່ນທ່ານນາຍພົລ ອາກ ກູນີລິອູສ (Gen. Art Cunilius) ຜູ້ບິນເຣເວນເບີ 20 ເປັນຫົວໜ້າ ປະຈຳຢູ່ພາຄສອງ ພຣະຣາຊອານາຈັກລາວ.



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 102</u>. (Raven  01 FAG.) ຍິນຊີ້ເປົ້າໝາຍ ເຣແວນ 01 ບິນຊອກຫາປືນໃຫ່ຍແລະ ທີ່ຢູ່ຂອງສັດຕຣູວຽດນາມເໜືອ ທີ່ເຂົ້າມາລຸກລານ ຣາຊອານາຈັກລາວ.*



*<u>ຮູບທີ່ 103</u>. Vam Ntxawg Tseej ທ່ານຫວາເຢີເຈັ໋ງ 1968.*

ປະຈຸບັນທ່ານໄດ້ຂຶ້ນຊັ້ນເປັນນາຍພົນແລ້ວ ແລະປະຈຳ ຢູ່ສະຫະຣັຖ. *(ຂອບໃຈນຳ ຫລານຊາຍ ວ່າງ ຈູທີ່ ໄດ້ເອົາຂ່າວນີ້ໃຫ້. ປະຈຸບັນ ຜູ້ກ່ຽວຢູ່ຣັຖ ກາລີຝອກເນັຍ ສະຫະຣັຖ ອາເມຣິກາ. ຂອບໃຈນຳນັກບິນວ່າງ ບີ, ແລະ ວ່າງຕູ້ ທີ່ເອົາຂ່າວນີ້ໃຫ້).*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 6.

# ການຈັດຕັ້ງຝ່າຍທະຫານພາຄ 2

ຢູ່ໃນເຂດທະຫານພາຄສອງ ມີນາຍທະຫານສຳຄັນຫລາຍທ່ານ. ຜູ້ບັງຄັບບັນຊາການພາຄແມ່ນ: ທ່ານນາຍພົລຕຣີ ວ່າງປາວ ເລີ່ມແຕ່ ປີ 1962 ເຖິງ ວັນທີ່ 14 ພຶດສພາ (May) ປີ 1975. ຍ້ອນ ສ.ປ.ປ.ລ. ຍຶດອຳນາຕ ແລ້ວ ໄດ້ອົພະຍົບໄປຢູ່ສະຫະຣັຖ ໄດ້ເຖິງແກ່ກັມ ວັນທີ່ 6 ເດືອນມະກະຣາ (January) ປີ 2011. <u>*(ເຊີນອ່ານ ຊີວະປະວັຕຂອງທ່ານນາຍພົນ ວ່າງປາວ ໃນໜ້າ ຊີວະປະວັຕ )*</u>






*<u>ຮູບທີ່ 103</u> (ຊ້າຍ). ທ່ານນາຍພົນຕຣີ ວ່າງປາວໃນປີ 1973 ຜ.ບ ເຂຕທະຫານພາຄ 2 ໃນຣາຊອານາຈັກລາວ.*
*<u>ຮູບທີ່ 105</u> (ຂວາ). ທ່ານພັນຕຣີ ວ່າງປາວ ກຳລັງຂຶ້ນໄປເຖິງ ພູປ່າດົງ ວັນທີ່ 5 ເດືອນມັງກອນ (January) 1961 ຈຶ່ງໄດ້ ຕັ້ງ ຊື່ໃສ່ວ່າ LS05. ຕັ້ງພື້ນທີ່ ແຫ່ງນີ້ເປັນສູນ ກາງເຕົ້າ ໂຮມ ກຳລັງ ເພື່ອຕໍ່ຕ້ານ ລາວແລະ ແກວ ຄ.ມ.ນ. ແລະ ຝ່າຍ ກາງທີ່ໄດ້ມາຍຶດແຂວງຊຽງຂວາງໄວ້.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



ຮູບທີ່ 106. ນາຍ ພິນວ່າງປາວ ແລະ ພັລະຍາ ຍ້ຽມຍາມ ບ້ານ ພັກແຄະ ຈາກ ຊ້າຍ ຫາຂວາ ແມ່ ຊົງມົວ, ແມ່ ຫລ້າ ຫລື ແມ່ ສີໄຫວ ແລະ ແມ່ ເຊັ່ຍທ່າວ (ແມ່ເຊັຍທ່າວ ໄດ້ຈາກ ໂລກນີ້ໄປແລ້ວ ປີ 2007.)



ຮູບທີ່ 107. ຄອບຄົວຂອງທ່ານ ນາຍພິນວ່າງປາວ ສມັຍ ປີ 1971. ເດັກສີ່ຄົນແຖວໜ້າ ຈາກຊ້າຍຫາຂວາ 1-ນາງຢີ້ງ ວ່າງ, 2-ທ້າວ ຈະເຣີນສຸກ ວ່າງ, 3-ນາງໄມກ້າ ວ່າງ, 4-ນາງໄມເກັ້ງວ່າງ ແຖວຫລັງ ຊ້າຍຫາ ຂວາ: 5-ທ່ານນາຍພິນຕຣີ ວ່າງປາວ 6-ນາງເຊັຍທ່າວ ພນັລະຍາທ່ານນາຍພິນ ເສັຍຊີວິດ ປີ 2007; 7-ສີສຸກ ວ່າງ; 8-ຈາວ່າງ (Tsav Vaj); 9-ໄຈວ່າງ; 10-ເຢ້ວ່າງ; 11- ສົມສະນຸກ ວ່າງ; 12- ລືວ່າງ; 13- ທວານູ ລີຝຸງ. ແຖວທີ່ສາມຢູ່ຫລັງ ຊ້າຍຫາຂວາ 14- ນາງເຈັ້ຍມົວ ພັນລະຍາ ທ່ານນາຍພິນ ເສັຍ ຊີວິຕໃນວັນທີ່ 22 ເດືອນສິງຫາ (August ), 2009 (Santa Ana, California) ຢູ່ຊັນຕາອານາ ກາລີຝອກເນັຍ. 15- ເກັ້ງວ່າງຢືນຕໍ່ໜ້າພັນລະ ຍານາງເຈັ້ຍມົວ16- ນາງໄຫລວ່າງ ;17-ແມ່ຫລ້າ ຫລື ສີໄຫວ ພັນລະຍາທ່ານນາຍພິນ ຄົນລາວ ລູ່ມ 18-ໄມເກົາຕໍ່ໜ້າເບື້ອງຂວາແມ່ ຫລ້າ;19-ໄມກາວ ລີຝຸງ ພນັລະຍາ ຝຣັງຊົວວ່າງ; 20-ນາງ ສີສະໝອນ ພັນລະຍາທ່ານຕູ້ເຢີ ລີຝຸງ; 21-ຝຣັງຊົວ ວ່າງ (Francois Vang) 22-ນາງໄປ້ລໍ ພັນລະຍາທ່ານນາຍພິນ. ສາມຄົນແຖວຫລັງສຸດ ຈາກຊ້າຍຫາຂວາ; 23-ຈື້ ວ່າງ; 24- ປາວ ວ່າງ ແລະ 25- ແລະ 25 ໄມຊີ (ນາງໝໍ).



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຜູ້ລອງພາຄ 2: ມີສອງທ່ານ ເຜົ່າລາວ ແລະ ເຜົ່າມົ້ງ ຄື: ຝ່າຍພີ່ນ້ອງລາວລຸ່ມແມ່ນພົລຈັດຕະວາ ເຈົ້າໂມນີວົງສ໌ ກິນດາວົງສ໌ (ເຊື້ອສາຍວັງໜ້າ ບຸຕອົງຄ໌ທີ່ສອງຂອງສເດັຈເຈົ້າກິນດາວົງສ໌) ເປັນຜູ້ຮອງເລີ່ມແຕ່ໃນປີ 1968-1973. ໄດ້ຖືກຍ້າຍໄປຢູ່ ນະຄອນວຽງຈັນທນ໌.

ໃນປີ 1973-1975 ແມ່ນ ພ.ອ. ອານາໄມ ເປັນຜູ້ລອງ ຜ.ບ. ພາຄ 2 ແທນເຈົ້າໂມນີວົງສ໌ ທີ່ຖືກຍ້າຍໄປຢູ່ວຽງ. ຝ່າຍພີ່ນ້ອງຊາວລາວເຜົ່າມົ້ງ ຜູ້ຮອງແມ່ນ ພ.ອ. ເນັ່ງຈື້ ທ່າວ.

ສປປລ ຍຶດອຳນາຕ, ພົນຕຣີ ວ່າງປາວ ໄດ້ອົພະຍົບໄປປະເທສໄທ໌ຍ ແມ່ນ ພົລຈັດຕະວາ ເຈົ້າໂມນີວົງ ໄດ້ໄປ ເປັນ ຜ.ບ ພາຄ 2 ແທນ, ຢູ່ນຳຝ່າຍ ສປປລ ແຕ່ຢູ່ບໍ່ໄດ້ ຈຶ່ງໄດ້ອົພະຍົບໜີ ແຕ່ໄດ້ຖືກຈັບໄປສັມມະນາ ຖືກປ່ອຍອອກມາໃນຕົ້ນປີ 1992, ໄດ້ຖືກເນຣະເທສຕົນເອງ ໄປຢູ່ປະເທສຝຣັ່ງເສສ ໃນທ້າຍປີ 1992. ໄດ້ ເຖິງ ແກ່ກັມອັນທີ່ 4 ຕຸລາ 2004 ທີ່ເມືອງ ບອ່ກໂດ (Bordeaux, France). ພ.ອ. ອານາໄມຫລັງຈາກບ້ານເມືອງຕົກໃຫ້ຄອມມຸຍນິສຕ໌ແລ້ວ ໄດ້ໜີໄປລີ້ພັຍຢູ່ປະເທສ ອອັສເຕຣເລັຍ ແລະເສັຍຊີວິຕ ໃນທີ່ນັ້ນ.

## ນາຍທະຫາຣຄົນສຳຄັນຂອງພີ່ນ້ອງລາວມົ້ງ

**ພ.ອ. ເນັ່ງຈື້ ທ່າວ**

ແມ່ນຜູ້ຮອງພາຄສອງ ຝ່າຍພີ່ນ້ອງເຜົ່າມົ້ງ. ໃນປີ 1950-1954 ທ່ານແມ່ນນັກຕໍ່ສູ້ຄອມມຸຍນິສຕ໌ ສມັຍສົງຄາມຝຣັ່ງເສສໃນອິນດູຈີນ ໄດ້ຂັ້ນຈ່າເອກ ແລະເປັນນ້ອງເຂີຍຂອງທ່ານນາຍພົລຕຣີ ວ່າງປາວ. ປວັດ ພ.ອ. ເນັ່ງຈື້ ມີດັ່ງນີ້: ໄດ້ໄປຮຽນໂຮງຮຽນນາຍຮ້ອຍທະຫາຣຝຣັ່ງເສສ ທີ່ດົງເຫັນ ໃນປີ 1952, ໄດ້ຂັ້ນຈ່າເອກ. ໄດ້ຕໍ່ສູ້ວຽດມິນຮ່ວມກັບທ່ານ ຣ.ທ. ວ່າງປາວ ແລະເປັນ ຜ.ບ. ກອງພັນ 2, ໄດ້ບຸກວຽດມິນຢູ່ໜອງແຮດປີ 1953-1954 ແລະ ຈົນຮອດສົງຄາມສະຫະຣັຖຢູ່ໃນອິນດູຈີນ. ໃນ 1961-1965, ເປັນ ຜ.ບ. ກອງພັນ ເບເວ 21. ໃນ 1965-1973 ໄດ້ມາເປັນທີ່ປຶກສາພາຄສອງ. ໃນ 1973-1975 ໄດ້ມາເປັນຮອງ ຜ.ບ. ພາຄສອງ. ໄດ້ອົພຍົບໄປຕັ້ງຖິ່ນຖານຢູ່ຣັຖແທກຊັສ, ສະຫະຣັຖ (Texas, USA) ໄດ້ເສັຍຊີວິດດ້ວຍໂຣກຊະຣາ 1995.

**ພ.ອ. ລີຕຸປາວ**

ໃນ 1961-1964 ຜູ້ຊ່ວຍພົລຕຣີ ວ່າງປາວ. ໃນປີ 1964-1969, ໄດ້ມາເປັນຫົວໜ້າເສນາທິການ (JOC Joint Operation Center) ຝ່າຍແອສຊີຢູ (SGU= Special Guerrilla Unit). ໃນ 1969-1975


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄດ້ຖືກແຕ່ງ ຕັ້ງເປັນ ຜ.ບ. ເຂດຍ່ອຍຊຽງຂວາງ. ໃນປີ 1975, ໄດ້ອົບພະຍົບໄປຢູ່ຝຣັ່ງເສສ ຈົນຮອດ 1984 ຈຶ່ງໄດ້ຍ້າຍໄປຢູ່ສະຫະຣັຖ.

### **ພ.ອ. ຢົ້ວວາລີ**




*<u>ຮູບທີ່ 108</u>. ທ່ານ ພ.ອ. ຢົ້ວວາ ລີ ຮູບ1970ເຂົ້າໄປສູ້ຣົບໃນທົ່ງໄຫຫີນຕາມ "ແຜນທະນົງກຽດ "ຂອງທ່ານນາຍພົນວ່າງປາວ. ຜູ້ຈັບ ວິທະຍຸ ແມ່ນນາຍພົນ ວ່າງປາວ; ຜູ້ສູບກອກຢາແມ່ນເຈົ້າມັງຄະລະ ລູກຊາຍເຈົ້າສຸວັນນາພູມາ ຜູ້ຖືໝວກໃຫ່ຍແມ່ນ ພ.ອ ຢົ້ວວາ ລີ.*

ໃນປີ 1953 ເປັນ ຜ.ບ. ກອງພັນ ທະຫານຣາບອາກາສ ຝຣັ່ງເສສ ພາຣະກິດໄລ່ໂຈມຕີແກວໄປເມືອງຫງາດ ແລະເມືອງໝອກ (LS46) ເປັນນັກລົບຝຣັ່ງເສສ ເຖິງປີ 1954. ຣຸ່ນຮຽນນາຍຮ້ອຍພ້ອມກັນກັບ ພ.ອ. ເນັ່ງຈື້ ທ່າວ. ປີ 1961 ຜ.ບ. ກອງພັນທີ່ 1 ຮັກສາເຂດລ່ອງແຈ້ງ. ປີ 1966, ໄດ້ມາເປັນທີ່ປຶກສາ ແລ້ວໃນປີ 1975 ໄດ້ອົພຍົບໄປຢູ່ຝຣັ່ງເສສ ໄດ້ເສັຍຊີວິດດວ້ຍໂຣກສະລາ 1982 ທີ່ປະເທສຝຣັ່ງເສສທາງພາຄໃຕ້.

### **ພ.ອ. ຊົວຢາງ**

ໃນປີ 1961-1962 ຜ.ບ. ກອງພັນທີ່ 2 . ໃນປີ 1962-1964 ໄດ້ໄປເປັນ ຜ.ບ. ເຂດ 11 ກອງພັນ 24 ຢູ່ ສົນຈື້ (LS02). ໃນປີ 1965-1968 ໄດ້ຖືກແຕ່ງຕັ້ງໃຫ້ໄປເປັນທີ່ປຶກສາ ກຳລັງຝ່າຍມິຕທີ່ຮັກສາເຂຕ ພູຜາທີ (LS85) ແລະ ເປັນທີ່ປຶກສາເຂດຍ່ອຍ ທົວພັນ. ໃນປີ 1969 ໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າ ເສນາທິການພາຄ 2 ພໍເຂົ້າປະຕິບັດໜ້າທີ່ບໍ່ເຖິງເດືອນ ກໍລາອອກ ເພາະຂາດການສຶກສາ. ຕັ້ງແຕ່ນັ້ນມາ ກໍບໍ່ມີໜ້າທີ່ຫຍັງສຳຄັນ ເປັນພຽງຜູ້ກວດກາຝ່າຍທະຫານທົ່ວໄປໃນພາຄສອງ ຈົນເຖິງມື້ອົພຍົບໃນວັນທີ່


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

14 ເດືອນພຶດສະພາ (May) 1975, ທ່ານ ພ.ອ. ຊີວຢາງ ໄດ້ອົພະຍົບໄປຢູ່ຝຣັ່ງເສສ ໄດ້ເສັຍຊີວິດທີ່ຝຣັ່ງເສສ ໃນວັນທີ່ 12 ເດືອນເມສາ (April) 2007.



*<u>ຮູບທີ່ 109</u>. ພ.ອ. ຊີວ ຢາງ ທີ່ປຶກສາທາງທະຫານພາຄສອງ. ຮູບປີ 1969 ແມ່ນການເລີ້ມຕົ້ນແຜນ ຫນຶ່ງກຽດໄປຍຶດທົ່ງໄຫຫີນ.*

**ພ.ອ. ຄຳຮູງ**

ໃນປີ 1968-1975 ເປັນຫົວໜ້າເສນາທິການ ທະຫານກອງທັບລາວ ພາຄ 2 ໄດ້ອົພຍົບໄປຢູ່ຝຣັ່ງເສສ ແລະ ໄດ້ເສັຍ ຊີວິດດ້ວຍພະຍາດຂອງຜູ້ກ່ຽວຢູ່ ປາຣີ ປະເທສຝຣັ່ງເສສ.

**ພ.ອ. ເຍັ່ຍຊູ້ຢ່າງ**

ໃນປີ 1961-1967 ຜ.ບ. ກອງພັນ 203 ຢູ່ແຖວພູຟ້າ ພູວຽງ, ກອງພັນນີ້ໄດ້ເຂົ້າບຸກໂຈມຕີ ສັດຕຣູຫລາຍຈຸດຢູ່ໃນເຂດທົ່ງໄຫຫີນ ມີໜ້າທີ່ຈັດຕັ້ງກອງພັນ ແລະກຣົມ ໃນກອງທັພ ພາຄ 2. ໃນປີ 1970, ຜູ້ກ່ຽວໄດ້ມາພັກຜ່ອນ. ປີ 1975 ໄດ້ອົພະຍົບໄປຢູ່ ຣັຖມີເນໂຊຕາ, ສະຫະຣັຖ.

**ພ.ອ. ເຈີປາວມົວ**

ໃນປີ 1961-1975 ເປັນຜູ້ບັງຄັບບັນຊາ ຄ້າຍບວມຫລົງ (LS32) ໄດ້ຕໍ່ຕ້ານຄອມມຸຍນິສ ຢ່າງອົງອາດກ້າຫານ ບໍ່ເຄີຍເສັຍຄ້າຍນີ້ຈັກເທື່ອ. ລູກນ້ອງເຈີປາວ ມົວ ມີທັງໝົດປະມານ 10 ພັນຄົນ ລວມກັບຄອບຄົວຫລາຍກວ່າ 12 ພັນຄົນ ມີຈຳນວນນຶ່ງໄດ້ອອກຈາກປ່າໄປສວາມິພັກຕໍ່ລາວແດງ ແລະແກວ ແຕ່ໄດ້ຫາຍສາບສູນໄປ ບໍ່ຮູ້ວ່າໄປຢູ່ໃສ່, ສະຕາກັມເຂົາເປັນແນວໃດ? ພວກທີ່ຍັງຢູ່ໃນປ່າຈຶ່ງຈຳເປັນຕ້ອງຕໍ່ສູ້



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຕໍ່ໄປບໍ່ຍອມໃຫ້ລາວແດງ ຂ້າຄືສັດ ເພື່ອກຽດຕໍ່ສູ້ເພື່ອຊາດ ບໍ່ຍອມໃຫ້ເຂົາຫຼອກສອກຂ້າຖິ້ມ ຫລື ເອົາໄປຂັງຄຸກທໍຣະມານ ຢູ່ໃນສູນດັດສ້າງ ວຽງໄຊຍ໌ ແຂວງຫົວພັນ. ຈຶ່ງຂໍຄວາມເຫັນໃຈຈາກຊາວໂລກ ແລະສະຫະຣັຖ ໃຫ້ເຂົ້າໃຈຊາວເຜົ່າມົ້ງ ທີ່ຕໍ່ສູ້ສົງຄາມວຽດນາມ ເພາະການຕໍ່ສູ້ຂັ້ນຕົ້ນນັ້ນ ແມ່ນ ຕັດສິນໃຈຕໍ່ສູ້ລັທທິຄອມມຸຍນິສຕ໌ ຮ່ວມກັບສະຫະຣັຖອະເມຣິກາ ເພື່ອຍັບຍັ້ງການແຜ່ຜາຍ ຂຍາຍອຳ ນາຈຄອມມຸຍນິສຕ໌ ຫລືເຊື້ອໄວຣັສແດງ (Red Virus) ໄປສູ່ໂລກເສຣີຕາວັນຕົກ ແລະເອເຊັຍ ຕາວັນ ອອກສ່ຽງໃຕ້ເປັນຕົ້ນຕໍ, ເພື່ອປ້ອງກັນສິທເສຣີພາບ ປະຊາທິປະໄຕຍກ່ອນທີ່ພັຍແດງ (Red peril) ຫລື ມະເຮັງແດງ (Red cancer) ຈະຄຸກຄາມໄປສູ່ບັນດາ ໂລກເສຣີທັງຫລາຍ. ພ.ອ. ເຈີປາວມົວ ໄດ້ຕັດ ສິນໃຈກັບໄປຊ່ວຍລູກນ້ອງ ເພື່ອພາເຂົາອອກໄປສູ່ຄວາມປອດພັຍ ແຕ່ໄດ້ເອົາຊີວິດໄປແລກ ໄດ້ເສັຍຊີ ວິດຢູ່ໃນປ່າ ປະເທສລາວ ໃນປີ 1994.

## ພ.ອ. ຢົງຈື້ ຢາງ

ໃນປີ 1968-1969 ຜ.ບ. ກ.ພ. 201 ຕັ້ງບ້ານນາ (LS15) ຈົນຮອດ 1969 ພ.ອ. ຕຸລົງຢາງໄດ້ໄປເປັນ ຜ.ບ. ແທນ. ໃນປີ 1969-1972 ເປັນທີ່ປຶກສາພາຄ 2. ໃນ 1972 ພ.ອ. ຢົງຈື້ຢາງ ໄດ້ໄປປ່ຽນ ຜ.ບ. ກອງພົລທີ່ 2 ຊົ່ວຄາວ ແທນ ທ່ານ ວ່າງເຢີ ສູນກາງຕັ້ງຢູ່ເທິງພູຫົວລົ້ນ ລະຫວ່າງ ພູເບັ້ຍ ແລະພູຜາໄຊຍ. ພ.ອ. ຢົງຈື້ຢາງ ເປັນຜູ້ໄດ້ປະສານງານ ກັບ ຜ.ບ. ກຣົມ 33 (ພ.ທ. ບົວລຽນ ມາຈາກສວັນະເຂຕ ພາຄ 3.) ທັງສອງໄດ້ສັ່ງຍົນຕ໌ ເຕ-28 ຖິ້ມລະເບີດໃສ່ສັດຕຣູ ທີ່ຢູ່ໃກ້ໆຝ່າຍມິຕເທິງພູຜາໄຊ, ຍົນຕ໌ໄດ້ຖິ້ມລະເບີດຜິດເປົ້າໝາຍ ໄດ້ໄປຖືກກອງພັນ 3 ຂອງກຣົມ33 ເຮັດໃຫ້ທະຫານຝ່າຍມິຕເສັຍຊີວິດ ແລະບາດເຈັບຫລາຍຄົນ. ການຜິດພາດຄັ້ງນີ້ ຍ້ອນສະພາບໜ້າດິນ ເປັນພູຊັນ ນັກບິນກະບໍ່ຖືກ ຈຶ່ງຖິ້ມລະເບີດຜິດພາດ. ຝ່າຍສັດຕຣູ ກໍມີ ປ.ຕ.ອ. ຫລາຍກະບອກ ຍິງຕ້ານໄປຈາກດ້ານເໜືອ ແລະດ້ານຕາວັນຕົກຂອງພູ. ນັກບິນແທນທີ່ຈະຖິ້ມລະເບີດຖ້ຽວລະລູກ ແຕ່ໄດ້ຖິ້ມໝົດທັງ 6 ລູກບາດດຽວ. ພ.ອ. ຢົງຈື້ຢາງ ໄດ້ອົພຍົບໄປຢູ່ ຣັດວິສຄອນຊິນ, ສະຫະຣັຖ, ໄດ້ເສັຍຊີວິດ ທີ່ນັ້ນໃນປີ1992 ດ້ວຍໂຣກຊະລາ.

## ພ.ອ. ເຍັ່ຍລື ວ່າງ

ໃນປີ 1961-1970, ເປັນ ຜ.ບ. ຄ້າຍພູສະບົດ ຢູ່ທາງທິສເໜືອຂອງເມືອງຄຳ (ບ້ານບານ) ໄດ້ເສັຍໃຫ້ສັດຕຣູໃນຕົ້ນປີ 1970 ໄດ້ມາປະກອບເປັນກອງພັນ 228. ໃນປີ 1970 ໄດ້ປ່ຽນໃຫ້ ພ.ທ. ວ່າງກົວ ມາເປັນ ຜ.ບ. ກອງພັນ ພ.ທ ວ່າງກົວ ໄດ້ນຳ ກອງພັນ 228 ໄປຊ່ວຍ ພາຄ 4, ໄດ້ໂຈມຕີ ສັດຕຣູຄອມມຸຍນິສຕ໌ ທີ່ ປາກຊ່ອງ, ແຂວງຈຳປາສັກ. ຄ້າຍສັດຕຣູ ດັ່ງກ່າວ ຝ່າຍມິດ ພີ່ນ້ອງລາວໄດ້ເຂົ້າໂຈມຕີຫລາຍຄັ້ງ ແຕ່ບໍ່ສາມາຖ ຍຶດໄດ້. ພ.ທ. ວ່າງກົວ ໄດ້ໂຈມຕີ ແລະຢຶດໄດ້ພູ ທັງສອງໃຫ້ ພາຄ 4. ໄດ້ເຮັດໃຫ້ ທ່ານນາຍພົນສຸດໃຈ ວົງສວັນ, ສເດັຈເຈົ້າບູນອູ້ມນະຈຳປາສັກ ແລະຜູ້ນຳຫລາຍຄົນໃນພາຄ 4 ດີໃຈຫລາຍ. ພ.ອ. ເຍັ່ຍລື ວ່າງ ໄດ້ເປັນທີ່ປຶກສາໃຫ້ ພ.ທ. ວ່າງກົວ ແລະ ພາຄ 2 ຈົນເຖິງ 1975


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແລ້ວໄດ້ອົພຍົບໄປສູນນ້ຳພອງ ຈັງຫວັດ ຂອນແກ່ນ, ປະເທສໄທຍ໌, ໄດ້ເສັຍຊີວິດຢູ່ສູນໃນເດືອນ 6, 1975 ດ້ວຍພະຍາດໄຂ້ປ່າ.

**ພ.ອ. ຕຸລົງ ຢາງ**

ໃນປີ 1961-1965 ຜ.ບ. ຄ້າຍພູໜອງຜີ ທາງຕາວັນຕົກຂອງພູຟ້າ, ພູວຽງ. ໄດ້ເປັນຜູ້ຕາງໜ້າ ພາຄ 2 ປະຈຳຢູ່ພາຄ 1 ແຂວງຫລວງພຣະບາງ ຫລາຍປີ. ພ.ອ. ຕຸລົງ ຢາງໄດ້ອົພະຍົບໄປຝຣັ່ງເສສ ແລ້ວ ຍ້າຍໄປຢູ່ຣັດ ມີຊີແກນ (Michigan USA) ປະຈຸບັນເປັນເຈົ້າຂອງຮ້ານອາຫາຣ ທີ່ໃຫຍ່ສົມຄວນ.

**ພ.ອ. ຕຸລີ້ ມົວ**

ປີ 1952-1960 ເປັນນາຍກອງເຜົ່າລາວສູງ "ມົ້ງ" ຢູ່ແຖວ ພູດູ, ໃນ1961-1967 ນາຍຄັງ ແອສຊີຢູ ພາຄ 2 ແມ່ນຜູ້ກຳເງິນຄຳ ທັງໝົດໃຫ້ທ່ານນາຍພົນ ວ່າງປາວ. ປີ 1967 ພ.ທ ວ່າງເນັ້ງໄດ້ໄປເປັນຫົວໜ້າຄັງແທນ ພ.ອ. ຕູ້ລີ້. ໃນ 1967-1969 ເປັນຫົວໜ້າກວດຣາຊກາຣທະຫາຣ ພາຄ 2 . 1969-1975 ເປັນຫົວໜ້າກອງເລຂາ ແລະເປັນທີ່ປຶກສາຂອງ ຜ.ບ. ພາຄ 2. ພ.ທ. ມົວເກົ້າ ເປັນຜູ້ຮອງ. ພ.ອ. ຕູ້ລີ້ມົວ. ໄດ້ອົພະຍົບໄປຢູ່ຝຣັ່ງເສສ ເຖິງປີ 1989 ໄດ້ຍ້າຍໄປຢູ່ສະຫະຣັຖ ໃນຣັຖໂກໂລຣາໂດ (Colorado) ແຕ່ຂາດໜັງສື ປົວພຍາດ ຜູ້ກ່ຽວໄດ້ກັບໄປຮັກສາຕົວຢູ່ປະເທສຝຣັ່ງເສສ.

**ພ.ອ. ທວາເຊັ້ງ ວ່າງ**

ໃນປີ 1950-1963 ຢູ່ຝ່າຍແນວລາວຮັກຊາຕ ຕໍ່ຕ້ານຝຣັ່ງເສສ ຢູ່ເຂຕເມືອງໝອກ LS46. ປີ 1963 ເຂົ້າມາ ຮອມຝ່າຍມິຕ ເພາະຮູ້ວ່າແມ່ນທ່ານນາຍພົນ ວ່າງປາວ ເປັນ ຜ.ບ. ພາຄ 2. ໃນປີ 1965 ໄດ້ໄປຮຽນວິຊານາຍທະຫາຣທີ່ລ່ອງແຈ້ງ, ແລ້ວຖືກແຕ່ງຕັ້ງເປັນ ຜ.ບ. ກອງພັນທີ່ 2. ໃນ ປີ 1968 ຖືກບາດເຈັບສະຫັດແລ້ວ ໄດ້ອອກມາພັກຜ່ອນ, ໃນປີ 1968-1975 ເປັນທີ່ປຶກສາໃຫ້ພາຄ 2 ຈົນຮອດມື້ ອົພະຍົບໄປຢູ່ ຣັດວິສຄອນຊິນ, ສະຫະຣັຖ.

**ພ.ອ. ລື ວ່າງ (ລືດຳ)**

ໃນ 1950-1954 ນັກຮົບຂອງຝຣັ່ງເສສ ເປັນ ຜ.ບ. ກອງຮ້ອຍ 1 ກອງພັນທະຫາຣຣາບອາກາສ ພາຣະກິດແມ່ນບຸກໂຈມຕີ ຕິດຕາມສັດຕຣູວຽດມິນ ທີ່ເຂົ້າໄປໂຈມຕີທົ່ງໄຫຫີນ ໄດ້ຖອຍອອກກັບໄປທາງໜອງແຮດ. ໃນ 1961-1966 ຖືກແຕ່ງຕັ້ງເປັນ ຜ.ບ. ກອງພັນ ຮັກສາຄວາມປອດພັຍໃນລ່ອງແຈ້ງ. ໃນ 1966-1968 ຖືກແຕ່ງຕັ້ງເປັນ ຜ.ບ. ກອງພັນຮັກສາ ຜາຂາວ (LS14). ໃນ 1968-1975 ຖືກແຕ່ງຕັ້ງເປັນທີ່ປຶກສາພາຄ 2. ໄດ້ອົພຍົບໄປຢູ່ແດນເອີດ ໂກໂລຣາໂດ ໄດ້ຍ້າຍມາຢູ່ຣັຖມິເນໂຊຕາມ ສະຫະຣັຖ ໄດ້ເສັຍຊີວິດດວ້ຍໂຣກສະລາ ປີ 2004.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ພ.ອ. ວ່າງໄທ**

ໃນ 1961-1968 ຜ.ບ. ກອງພັນ 211.

ໃນ 1969 ໄດ້ຖືກແຕ່ງຕັ້ງເປັນທີ່ປຶກສາໃຫ້ສູນຝຶກພາຄ 2 ແລະ ກອງພັນຕ່າງໆ ໃນພາຄ 2. ຜູ້ກ່ຽວໄດ້ອົພະຍົບມາຢູ່ຣັຖ ກາລີໂຟເນັຍ, ສະຫະຣັຖ ປະຈຸບັນ (2006) ເປັນປະທານນັກຮົບເກົ່າລາວ/ ລາວສູງ "ມົ້ງ" ທີ່ສະຫະຣັຖ.

**ພ.ອ. ລີຊ້າງ**

ໃນ 1959 ຮຽນຈົບໂຮງຮຽນໂອບຮົມຄຣູ ທີ່ນະຄອນວຽງຈັນທນ໌ ໄດ້ໄປເປັນຄຣູສອນໂຮງຮຽນຢູ່ໂພນສວັນໃນປີ 1960-1961. ຍ້ອນສະພາບການບ້ານເມືອງໄດ້ປ່ຽນແປງ ໄດ້ເຂົ້າທະຫານໄດ້ຖືກແຕ່ງຕັ້ງເປັນ ຜ.ບ. ເຂດຍ່ອຍຫລາຍບ່ອນ ເພື່ອຝຶກແອບກຳລັງຂອງຝ່າຍມິຕ ເພື່ອຕຽມຕໍ່ສູ້ກັບສັດຕຣູ. ໃນປີ 1968 ແຂວງຫົວພັນໄດ້ຕົກໃຫ້ສັດຕຣູ. ພ.ອ. ລີຊ້າງໄດ້ກັບມາປະຈຳໜ້າທີ່ຢູ່ແນວຫລັງ. ໃນປີ 1975 ໄດ້ອົພຍົບມາຢູ່ຣັດກາລີຟອກເນັຍ ສະຫະຣັຖ. ໄດ້ກັບໄປທ່ຽວປະເທສໄທຍ໌ ໄດ້ເສັຍຊີວິດໃນວັນທີ່ 25 ເດືອນສິງຫາ 1995. ໄດ້ເອົາສົບກັບສະຫະຣັຖ ໄດ້ຝັ່ງໄວ້ທີ່ ຊາງກົນໍ, ຣັຖມິຊີແກນ ຄຽງຂ້າງປ່າຊ້າຂອງເມັຍ (ທີ່ໄດ້ເສັຍຊີວິດໄປໃນ ປີ 1983).

ພໍ່ຂອງ ພ.ອ. ລີຊ້າງ ແມ່ນເຈົ້າເມືອງ ລີ ຕົງປາວ ຄົນພື້ນເມືອງໜອງ ແຮດ ຢູ່ບ້ານນ້ຳກັ່ນ ໄກ້ຄ້າຍພະເນມ, ຊຶ່ງເປັນຄ້າຍສຳຄັນຂອງຝຣັ່ງເສສ ຢູ່ໃນເຂຕໜອງແຮດ ສໄມສົງຄາມວຽດມິນ. ໃນປີ 1952 ແກວວຽດມິນໄດ້ມາຕີຄ້າຍພະເນມຢ່າງໜັກ ເພື່ອໃຫ້ຍຶດເມືອງໜອງແຮດໄດ້, ວຽດມິນໄດ້ຕາຍຢູ່ຄ້າຍນີ້ ຫລາຍຮ້ອຍຄົນ. ເຈົ້າເມືອງຕົງປາວ ໄດ້ເຮັດວຽກດີທີ່ສຸດໃຫ້ຝຣັ່ງເສສ. ໃນປີ 1975 ເຈົ້າເມືອງ ຕົງປາວ ໄດ້ອົພະຍົບໄປຢູ່ຝຣັ່ງ ກັບລູກໄພ້ ຊຶ່ງເປັນເມັຍທີ່ສອງ ຂອງ ພ.ອ. ລີຊ້າງ ແມ່ນພີ່ນ້ອງລາວ ພາຄໃຕ້ເມືອງປາກເຊ ຊື່ ນາງບູດສະດີ. ເຈົ້າເມືອງຕົງປາວ ລີ ໄດ້ເສັຍຊີວິຕຢູ່ ຝຣັ່ງເສສໃນປີ 1984.



**ພ.ອ. ໄຊດາງຊົ່ງ**

ຮູບທີ່110. ທ່ານ ພ.ອ ໄຊດາງ ຊົ່ງ ແລະ ທ່ານ ຢອກເຢີ (George or nickname Digger US. CIA Advisor GM 21 in 1970-1971)ນັກຊ່ຽວຊານ ຊີ ໄອ ເອ ຂອງ ສະຫາຣັຖ ຊ່ວຍເບິ່ງແຍງກົມ 21 ໃນປີ 1970-1971.

ຜ.ບ. ສູນຝຶກ ພ.ອ. ໄຊດາງຊົ່ງ ແມ່ນນາຍທະຫານຝຶກໂອບຮົມ ທີ່ມີຣະບຽບວິໄນດີ, ແລະເຄັ່ງຄັດ ໄດ້ອົພຍົບໄປຢູ່ເມືອງມີວວອກກີ ຣັຖວິສຄອນຊິນ, ສະຫະຣັຖ (Milwaukee, Wisconsin).



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ພ.ອ. ລີເຕັ້ງ**

- ປີ 1961 ຮັບຣາຊການທະຫານ, ຖືກບັນຈຸຢູ່ໃນກອງພັນ ອາສາສມັກ ທີ່ 21.
- ປີ 1961 -1962 ຝຶກວິຊາທະຫານ ແລະ ຮຽນຝຶກເປັນຝ່າຍຜູ້ນຳ ຢູ່ປະເທສໄທ໌ຍ.
- ປີ 1963 -1965 ເປັນ ຜ.ບ. ກອງພັນ ແອສຊີຢູ (SGU #202.)
- ປີ 1966, ເປັນຫົວໜ້າສູນຝຶກທີ່ລ່ອງແຈ້ງ.
- ປີ 1966 -1968, ເປັນຜູ້ຕາງໜ້າພາຄ 2 ປະຈຳຢູ່ໃນນະຄອນວຽງຈັນທນ໌.
- ປີ 1968 -1969, ເປັນຫົວໜ້າຫອ້ງການສາມ ໃນການລຸກຣົບໄປຍຶດພູຜາທີ LS85 ຄືນ, ຫອ້ງການຕັ້ງຢູ່ລ່ອງແຈ້ງ.
- ປີ 1970 -1971, ອົບລົມວິຊາເສນາທິການຟາຍທະຫານ ທີ່ນະຄອນວຽງຈັນທນ໌ ຄູສອນແມ່ນຄົນຝຣັ່ງເສສ.
- ປີ 1971-1972, ຫົວໜ້າເສນາທິການ ຝ່າຍນຳສິ່ງສະບຽງອາຫານ (JOC Logistics) ແລະເຄື່ອງໃຊ້ຂອງທະຫານ.
- ປີ 1972 -1973, ເປັນ ຜ.ບ. (SGU) ກຣົມ23.
- ປີ 1973 -1975, ເປັນຜູ້ລອງຫົວໜ້າເສນາທີ່ການ ພາຄ 2 ດ້ານເບິ່ງແຍງ ສະບຽງແລະອາຫານ (Logistics). ເດືອນພຶດສພາ 1975, ຜູ້ກ່ຽວໄດ້ອົພຍົບໄປຢູ່ຣາຊອານາຈັກໄທ໌ຍ. ປີ 1976, ເປັນອົພະຍົບມາເຖິງ ສະຫະຣັຖ ແລະ ຢູ່ຣັຖມີເນໂຊຕາ.

**ພ.ອ. ລີຊີບລົງ ລີຟູງ**

ພ.ອ. ລີຊີບົຣງ ເປັນນາຍທະຫານຄົນສຳຄັນເຂດທະຫານ ພາກ 2, ທ່ານມີໜ້າທີ່ອັນສຳຄັນເພີ່ມ ຄື: ເປັນຜູ້ໃກ້ສິດກັບທ່ານນາຍພົລວ່າງປາວ ຜ.ບ ພາກ ສອງ ແລະ ພະຍາດຳຣົງຣິທີໄກ ຕູ້ບີລີຟູງ ເພື່ອການຕິດຕໍ່ຫາກມີຄວາມຈຳເປັນ. ທ່ານລີຊີບົຣງໄດ້ອົພະຍົບໄປຢູ່ປະເທດຝຣັ່ງເສດ ແລະ ໄດ້ເສັຍຊີວິດຢູ່ທີ່ນັ້ນໃນປີ 1982.

ພ.ອ. ລີຊີບລົງ ແມ່ນລູກຊາຍ ອ້າຍຂອງພຣະຍາຕູບີ ລີຟູງ ຊື່ ທ່ານເປົ້າເຢ້ ໄດ້ເສັຍຊີວິດຍ້ອນຕົກມ້າ.

**ພ.ອ. ລີໜາວເກົາ ລີຟູງ**

ເປັນລູກຊາຍຄົນທີ່ສາມຂອງທ່ານ ລີຟູງ ກັບເມັຍຄົນທີ່ສາມຊື່ ນາງກືຈີວ ແມ່ນຈູ້ມເຈື້ອ ພີ່ນ້ອງມົ້ງແຖວປາກຄາ ທິສເໜືອຕາວັນອອກຂອງຊຽງຂວາງ ໃກ້ກັບຊາຍແດນວຽດນາມເໜືອ. ໃນປີ 1953-1954, ທ່ານ ພ.ອ. ລີ ໜາວເກົາ ໄດ້ເປັນນັກຣົບຝຣັ່ງເສສ ປະຈຳຢູ່ກອງພັນໂດດຈອ້ງ ໄລ່ໂຈມຕີວຽດມິນໄປຫາໜອງແຮດ. ໃນປີ 1961-1969, ໄດ້ເປັນ ຜ.ບ. ກອງພັນປືນໃຫ່ຍພາຄ 2. ໃນປີ 1969, ຈຶ່ງໄດ້ປ່ຽນໃຫ້ ພ.ທ. ຢ່າງຈື້ ເປັນ ຜ.ບ. ກອງພັນປືນໃຫ່ຍແທນ. ປີ 1968-1975, ເປັນທີ່ປຶກສາທະຫານພາຄ 2. ໄດ້


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ອົພະຍົບໄປຢູ່ຝຣັ່ງ ແລະໄດ້ຍ້າຍຈາກຝຣັ່ງ ໄປຢູ່ຣັຖມິເນໂຊຕາ, ສະຫະຣັຖ. ໄດ້ເສັຍຊີວິດໃນວັນທີ່ 5 ເດືອນພຶດສພາ (May ) 2010 ຕອນເຊົ້າ.

**ພ.ອ. ມົວສື**

ລູກຊາຍຂອງ ພ.ອ. ເຈີປາວມົວ ໄດ້ຮັບໜ້າທີ່ເປັນຜູ້ຕາງໜ້າພາຄ 2 ຢູ່ແຖວໄຊຍະບຸຣີ, ຫລວງນ້ຳທາ, ນ້ຳຍູ້ ແລະຫລວງພຣະບາງ. ໄດ້ໄປຮຽນເສນາທິການທະຫານຢູ່ລ່ອງແຈ້ງ. ໃນປີ 1972-1973 ໄດ້ຖືກແຕ່ງຕັ້ງເປັນຫົວໜ້າເສນາທິການ ທະຫານແອສຊີຢູ (SGU) ພາຄ 2 ແທນ ພ.ອ. ລີຕູ້ປາວ. ໃນປີ 1973-1975 ໄດ້ຖືກແຕ່ງຕັ້ງ ເປັນຜ.ບ. ກອງພົລທີ່ 2 ຮັກສາການເຂດສະລາພູຄູນ ບ່ອນຖນົນເລຂທີ່ 13 ແລະ 7 ຄີບກັນ. ຜູ້ລອງແມ່ນ ພ.ທ. ວ່າງເນັ້ງ. ພ.ອ. ມົວສື ໄດ້ອົພະຍົບໄປຢູ່ປະເທສໄທ໌ຍ ບໍ່ໄດ້ໄປປະເທສ ອື່ນຕໍ່.

**ພ.ອ. ຕົງວາ ລໍ**

ໃນປີ 1967-1969 ຜ.ບ. ກອງພັນ 221 ໄດ້ເຂົ້າໄປຍຶດຄ້າຍເທິງພູ ບ້ານນ້ຳໄມ້ ໄກ້ໆຫີນຕັ້ງ (LS74) ບໍ່ໄດ້ດົນ, ກໍຖືກສັດຕຣູມາໂຈມຕີ, ໄດ້ເສັຍຊີວິດທີ່ຄ້າຍນ້ຳໄມ້ ໃນປີ 1969.

**ພ.ອ. ລີປາວ**

ໃນປີ 1950-1954 ເປັນທະຫານຝຣັ່ງເສສ ປະຈຳຢູ່ກອງຮ້ອຍທະຫານ ຣາບອາກາສຝຣັ່ງ ຕິດຕາມຈາເອກ ຢົ້ວວາລີ ໄປໂຈມຕີວຽດມິນແຖວ ເມືອງໝອກ ໄປຫາໜອງແຮດ. ໃນປີ 1959 ພ.ຕ. ວ່າງປາວ ສັ່ງໃຫ້ ຣ.ອ. ລີປາວ ໄລ່ຕິດຕາມກອງພັນປະເທສ ລາວທີ່ໄດ້ໂຕນອອກຈາກທົ່ງໄຫຫີນ ຜ.ບ. ກອງພັນແມ່ນ ພ.ທ. ຕູ້ຢາ ຈຶ່ງໄດ້ນຳໄປທັນ ມີການຕໍ່ສູ້ກັນເລັກນ້ອຍ ຢູ່ໄກ້ໆເມືອງໝອກ. ໃນປີ 1963-1967, ໄດ້ຖືກແຕ່ງຕັ້ງໄປເປັນນາຍເຂດ ຫລາຍບ່ອນ ຄື: ແຂວງໄຊຍະບຸຣີ, ແຂວງຫລວງພຣະບາງ ແລະແຂວງຫລວງນ້ຳທາ. ໃນປີ 1975, ໄດ້ອົພຍົບໄປຢູ່ຝຣັ່ງເສສ ເສັຍຊີວິດ ຢູ່ທີ່ນັ້ນ ໃນປີ 2005 ດ້ວຍພຍາດຂອງຜູ້ກ່ຽວ.

**ພ.ອ. ຢົ້ວປາວຊີງ**

ຜ.ບ. ກອງພັນ ແລະ ຜ.ບ. ກຣົມ ປະຈຳຢູ່ລ່ອງແຈ້ງ ໄດ້ອົພະຍົບມາຢູ່ຣັຖ ໂກໂຣລາໂດ, ສະຫະຣັຖ.

**ພ. ອ. ລໍເຊັ້ງ**

ອາດີດນາຍທະຫານ, ໄດ້ຕໍ່ສູ້ສັດຕຣູນຳທ່ານນາຍພົລ ວ່າງປາວ ມາແຕ່ສມັຍຝຣັ່ງເສສ ແລະໄດ້ຮຽນໂຮງຮຽນນາຍຮ້ອຍຝຣັ່ງ ພ້ອມເນັ່ງຈື້ ທ່າວ, ແລະ ຢົ້ວວາ ລີ. ຜູ້ກ່ຽວໄດ້ຊັ້ນເປັນ ພ.ອ. ໄດ້ປະໜ້າທີ່ການດ້ານທະຫານ, ໄດ້ອອກໄປທຳໄຮ່ທຳນາ ດັ່ງປະຊາຊົນສາມັນ ຢູ່ຫລັກ 52 ໄກ້ນະຄອນວຽງຈັນທນ໌ ບໍ່ຮູ້ຂ່າວຜູ້ກ່ຽວ ເພາະບໍ່ໄດ້ອົພະຍົບໜີ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ພ.ອ. ລີເລົາ**

ເປັນບຸກຄົນສຳຄັນຄົນນຶ່ງໃນແຂວງຫົວພັນ. ໃນປີ 1971, ໄດ້ເປັນ ຜ.ບ. ກຣົມ 26 ໄດ້ເຂົ້າໄປໂຈມຕີສັດຕຣູຢູ່ຊ່ອງຮັກເມືອງເຄີງ ແລະທົ່ງໃຫຫີນ 1971-1972. ໃນປີ 1975 ຜູ້ກ່ຽວໄດ້ອົພະຍົບໄປຢູ່ເມືອງໄທ໌ຍ ບໍ່ຍອມໄປປະເທສທີ່ສາມ ສຸດທ້າຍກໍຕ້ອງໄດ້ມາສະຫະຣັຖ ໄດ້ເສັຍຊີວິດໃນວັນທີ່ 23 ເດືອນທັນວາ ປີ 2007 ເວລາ 7:00 ເຊົ້າທີ່ ຣັຖ ນອສໄຄໂຣໄລນາ.

**ພ.ອ. ຊົ້ງເລັ່ງຊົງ**

ເກີດ ປີ 1940 ຢູ່ພູສັນ ເມືອງແປກ ແຂວງຊຽງຂວາງ. ໃນປີ 1947 ໄດ້ມາເຂົ້າໂຮງຮຽນຢູ່ພູດູ, ຕາແສງ ພູສັນ, ເມືອງແປກ, ແຂວງຊຽງຂວາງ. ໃນປີ 1953-1955 ໄດ້ເຂົ້າເປັນທະຫາຣບ້ານຂອງຝຣັ່ງເສສ ມີໜ້າທີ່ຮັກສາເຂດພູວຽງ.

ໃນປີ 1960 ຕອນກອງແລ ເຮັດຣັຖປະຫາຣ ໄດ້ເຂົ້າມາເປັນນາຍທະຫາຣຊັ້ນນາຍຮ້ອຍຕຣີ ເປັນ ຜ.ບ ກອງຮ້ອຍ 4 ກອງພັນ 201. ໃນປີ 1967-1968, ໄດ້ເຂົ້າຮຽນເສນາທິການ ຢູ່ລ່ອງແຈ້ງ ພາຄ 2. ໃນປີ 1968-1969 ຜ.ບ. ກອງພັນ 209. ໃນປີ 1969-1972 ໄດ້ຖືກແຕ່ງຕັ້ງໄປເປັນ ຜ.ບ. ກຣົມ 23. ໃນປີ 1972 ພ.ທ. ວ່າງຢົວ ເຂົ້າໄປຮັບໜ້າທີ່ແທນ. ວ່າງຢົວ ຖືກເຈັບແລ້ວແມ່ນ ພ.ອ ລີເຕົ້ງເປັນ ຜ.ບ. ກຣົມ 23. ປີ 1974 ໄດ້ຍູບທະຫາຣ ແອສຊີຢູ (S.G.U) ໄປເປັນທະຫາຣ ກອງທັບແຫ່ງຊາດ. ໃນປີ 1972-1975, ພ.ອ. ຊົ້ງເລັ່ງ ຊົງ ໄດ້ມາເປັນ ຜ.ບ. ກອງພັນ ບໍຣິການ ພາຄ 2. ໃນວັນທີ່ 14 ເດືອນພຶດສະພາ (May) ປີ 1975 ອົພຍົບໄປຢູ່ສູນນ້ຳພອງ. ປີ 1976 ໄດ້ຍ້າຍໄປຢູ່ ສູນວິໄນ. ປີ 1993 ຈຶ່ງໄດ້ມາ ສະຫະຣັຖ ມາຢູ່ຣັຖ ມິເນໂຊຕາ. ໃນປີ 2005 ໄດ້ຍ້າຍໄປຢູ່ຣັຖ ຟຣໍຣິດາ. ພ.ອ. ຊົ້ງເລັ່ງ ຊົງ ເລົ່າວ່າ "ໄປຮອດ ຟຣໍຣິດາ ຄືມີຊີວິດສົດຊື່ນຫລາຍກ່ວາຢູ່ ມິເນໂຊຕາ, ຮ່າງກາຍແຂງແຮງກ່ວາ." ໄດ້ຖາມລາວວ່າເປັນຫຍັງຈຶ່ງຮູ້ສຶກແບບນັ້ນ, ຜູ້ກ່ຽວຕອບວ່າ "ຢູ່ມິເນໂຊຕາ ມັນໜາວ, ບໍ່ໄດ້ມີໂອກາສອອກກຳລັງກາຍຢູ່ນອກບ້ານຄື ຣັຖຟຣໍຣິດາ, ອາກາສ ກໍບໍ່ແຕກຕ່າງຈາກເມືອງລາວ ຫລາຍ." ແຕ່ໃນປີ 2008 ຊົ້ງເລັ່ງ ຊົງ ຍັງ ໄດ້ກັບຄືນໄປຢູ່ມິເນໂຊຕາຄືນ ຍ້ອນສຸຂະພາບ. ຢູ່ ຝຣໍຣິດາ ກາຣຊ່ວຍເຫລືອດ້ານກາຣປົວເຈັບໄຂ້ ບໍ່ຄ່ອຍດີເທົ່າ ຣັຖມິເນໂຊຕາ ກາຣແປພາສາກໍບໍ່ຄ່ອຍມີ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ນາຍທະຫານຄົນສຳຄັນຂອງພີ່ນ້ອງລາວລຸ່ມ

**ພ.ອ. ຈັນສົມ ປາກດີໂມນີວົງ**

ປີ 1973-1975 ຜ.ບ. ເຂດຍ່ອຍ ແລະເຈົ້າແຂວງຫົວພັນ ຈົນເຖິງມື້ໄດ້ໄປຖືກຄຸກຢູ່ສູນສັມະນາ ດົດສ້າງ ວຽງໄຊຍ. ໃນປີ 1988, ຜູ້ກ່ຽວໄດ້ຖືກປ່ອຍອອກມາແລ້ວໄດ້ອົພະຍົບໄປຢູ່ຝຣັ່ງເສສ ໄດ້ເສັຍຊີວິດທີ່ນັ້ນໃນເດືອນມັງກອນ (January ) ປີ 2006.

**ພ ອ. ດວງຕາ ນໍຣະສິງ**

ຜ.ບ. ກອງພັນສວັດດີການພາຄ 2. 1975 ໄດ້ອົພະຍົບມາຢູ່ສະຫະຣັຖ ຢູ່ກາລີຟອກເນັຍ ຕໍ່ມາໄດ້ຍ້າຍມາຢູ່ຣັດ ຢອກເຢັຍ (Georgia, USA)

**ພ.ອ. ຜັນ ສີຫາຣາຊ**

ໃນປີ 1965-1969 ເປັນ ຜ.ບ. ເຂດຍ່ອຍ ແລະ ເປັນເຈົ້າແຂວງຯຫົວພັນແທນ ພ.ອ. ທອງ. ໃນຕົ້ນ ປີ 1969 ຖືກສັດຕຣູບຸກໂຈມຕີປິດລອ້ມຄ້າຍນາຄັງ ດ້ວຍກໍາລັງອັນມະຫາສານ ບໍ່ມີກອງໜູນຫລັງໄປ ຊ່ວຍ, ໄດ້ເສັຍທີ່ໝັ້ນເສັຍ ພ.ອ. ຜັນ ສີຫາຣາຊ ພ້ອມກໍາລັງທະຫານຫລາຍຄົນຢູ່ຄ້າຍ(LS36) ທຸກຄົນຕ້ອງສູ້ຕາຍ ຫລື ຖືກຈັບ.

**ພ.ອ. ທ່າວໃຈ**

ໃນປີ 1960 ຫາ 1975 ເປັນຜູ້ຕາງໜ້າພາຄສອງ ປະຈໍາຣາຊອານາຈັກໄທ໌ຍ ສູນກາງ ຕັ້ງຢູ່ອຸດອນທານີ ທ່ານບໍ່ໄດ້ອົພຍົບໜີ ໄດ້ເສັຍຊີວິດຢູ່ຣາຊອານາຈັກໄທ໌ຍ.



*ຮູບທີ່ 111. ຈາກຊ້າຍຫາຂວານາຍທະຫານ ທ່ານຮັງຊາວ ຫົວໜ້າຫອ້ງການສອງພາຄສອງ; ທ່ານເບີສະມິດຜູ້ຕາງໜ້າຝ່າຍທະ ຫານຂອງ ສະຫະຣັດ; ທ່ານ ຊີວຍາງ ຫົວໜ້າທະຫານ ພາກສອງ; ທ່ານທ່າວໃຈ ຜູ້ຕາງໜ້າພາຄສອງປະຈໍາ ຣາຊອານາຈັກ ໄທ໌ຍ ທີ່ຢູ່ອຸດອຣ ປະເທສໄທ໌ຍ. ຮູບເດືອນກູມພາ ວັນທີ່ 27 ປີ 1963,ເວລາຖືກເຊີນຢ້ຽມຢາມ ສະຫະຣັຖ ຈາກທ່ານປະທານາ ທິບໍດີ ເຄນເນດີ.*

**ພ.ອ. ທອງ ວົງຣາຊພົ**

ໃນປີ 1964-1965 ຜ.ບ. ເຂດຍ່ອຍ ແຂວງຫົວພັນ ແລະເປັນເຈົ້າແຂວງ ປ່ຽນ ພ.ອ. ຄໍາສາວ ແກ້ວວິໄລ. ພ.ອ. ທອງ ໄດ້ເສັຍຊີວິດຢູ່ແນວໜ້າ ຍ້ອນໄດ້ຂຶ້ນເຄື່ອງບິນໄປຊ່ວຍເອົານັກບິນອາເມຣິກັນ ທີ່ຖືກຍິງຕົກ,



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ນັກບິນອອກມາໄດ້ປອດໄພ້ຍ ແຕ່ໜ້າເສັຍດາຍ ພ.ອ. ທອງບໍ່ລອດ ເພາະຖືກຍິງຕາຍຄາເຊືອກທີ່ຢ່ອນລົງໄປເອົາ ດ້ວຍປືນກ້ອງສ່ອງຂອງສັດຕຣູ ໄດ້ເອົາສົບມາເຮັດພິທີຢູ່ນະຄອນຫລວງວຽງຈັນທນ໌.

**ພ.ອ. ພິມພາ ແລະ ພ.ອ. ຄຳສາວ ແກ້ວວິໄລ**

ໄດ້ໄປປະຈຳຢູ່ວຽງຈັນທນ໌ເພື່ອຕິດຕາມຂ່າວຕ່າງໆ ເພື່ອລາຍງານ ໃຫ້ຂັ້ນສູງໃນເຂດ ທະຫານຣພາຄ 2. ພ.ອ. ຄຳສາວ ແກ້ວວິໄລ ແມ່ນພີ່ນ້ອງ ຊຳເໜືອ ທີ່ໄດ້ຮອ່ມຕໍ່ສູ້ ສັດຕຣູ ກັບຝ່າຍມິດ ມານານ.

**ພ.ອ. ຄຳກາບ ແລະ ພ.ອ. ທ້າວນາ**

ໃນປີ 1967-1971 ເປັນ ຜ.ບ. ກອງພັນກໍ່ສ້າງເຂດທະຫາຣພາຄ 2 ແລະໄດ້ຖືກຍົກຍ້າຍໄປຢູ່ນະຄອນວຽງຈັນທນ໌ ບໍ່ໄດ້ຮັບຂ່າວຈາກຜູ້ກ່ຽວ. ໃນປີ 1971-1975, ພ.ທ. ທ້າວນາ ໄດ້ເປັນ ຜ.ບ. ກອງພັນແທນ ພ.ອ. ຄຳກາບ. ພ.ທ. ທ້າວນາ ບໍ່ໄດ້ອົພຍົບໜີ, ຫລັງຈາກຄອມມຸຍນິສຕ໌ຢຶດໄດ້ບ້ານເມືອງໝົດ ຄອມມຸຍນິສຕ໌ໄດ້ສົ່ງຜູ້ກ່ຽວໄປປະຈຳກາຣກໍ່ສ້າງຢູ່ທົ່ງໄຫຫີນ ຈາກນັ້ນກໍບໍ່ຮູ້ຂ່າວ.

**ພ.ອ. ຕຸ ແສງອາຣູນ**

1965-1969 ເປັນນາຍທະຫາຣ ທີ່ປຶກສາ ທີ່ດິນນານ ຂອງທະຫາຣ ພາຄ 2 ປະຈຳກາຣຢູ່ຊຳທອງ, ຢູ່ລ້ອງແຈ້ງ ແລະເປັນນາຍທະຫາຣລາວທີ່ປາກພາສາລາວສູງໄດ້ "ມົ້ງ" ດີ. ທ່ານໄດ້ອົພຍົບໄປຢູ່ຣັຖຟຣໍຣີ ດາສະຫະຣັຖ ດຽວນີ້ກຳລັງຢູ່ໃນຂັ້ນ ສຸຂພາບບໍ່ສົມບູນ.

**ພ.ອ. ບຸນນ້ອຍ ເຜົ່າພົງສວັສ**

ໃນປີ 1969-1973 ເປັນ ຜ.ບ. ເຂດຍ່ອຍ ແລະເປັນເຈົ້າແຂວງງທົວພັນ ຫລັງຈາກ ພ.ອ. ຜັນສີຫາຣາຊ ໄດ້ເສັຍຊີວິດຢູ່ນາຄັງ LS36. ບໍ່ຮູ້ຂ່າວຂອງຜູ້ກ່ຽວເວລາ ອົພຍົບ.

**ພ.ອ. ບົວລອຍ**

ໃນ ປີ 1972-1975 ຖືກແຕ່ງຕັ້ງເປັນ ຜ.ບ. ກອງພັນ ຈິຕະວິທະຍາ ບໍ່ຮູ້ຂ່າວຂອງຜູ້ກ່ຽວໃນ 1975.

**ພ.ອ ສີສະວັສ ວົງສ໌ຄຳເຮືອງ**

ໄດ້ຖືກໄປສັມມະນາຢູ່ຄູກເມືອງຊຳໃຕ້, ຖືກປົດປ່ອຍອອກ ຍ້ອນຈິນຕິແກວໃນປີ 1979, ໄດ້ໄປຢູ່ນຳລູກເມັຍທີ່ປະເທສຝຣັ່ງເສສ ໄດ້ເສັຍຊີວິດທີ່ນັ້ນ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ພ. ຕ. ອ ພິມພອນ**
ຫົວໜ້າຕຳຣວຈພາຄ 2 ໄດ້ເສັຍຊີວິດຢູ່ ພາຄ 2 ບໍ່ຮູ້ປວັດດີ.

**ພ.ອ. ວັດຖາ (ບໍ່ຮູ້ປວັດດີ).**

**ພ.ອ. ບູນຈັນ (ບໍ່ຮູ້ປວັດດີ)**

**ພ.ອ. ພັນເອັ່ນ ອິນທະວີໄຊ຺ຍ** (ບໍ່ຮູ້ປວັດດີ. ຮູ້ແຕ່ວ່າໄດ້ອົພະຍົບ ກັບຄອບຄົວໄປຢູ່ທີ່ປະເທສ ຝຣັ່ງເສສ).

**ນາຍພົນເເອຕຳ ສີງຫ໌ວົງສາ**
ນາຍທະຫາຣ ຄົນພື້ນເມືອງແຂວງຫົວພັນ ຫົວໜ້າຫ້ອງການສອງ ກອງທັພແຫ່ງຊາຕ. ໄດ້ພາຄອບຄົວອົພຍົບໄປຢູ່ປະເທສຝຣັ່ງເສສ ແລ້ວໄດ້ຍ້າຍໄປຢູ່ປະເທສໂອສເຕຼເລັຍ (Australia).

<u>**ນາຍທະຫາຣພີ່ ນອັງ ລາວສູງ "ມົ້ງ" ແລະ ລາວ ຂັ້ນພັນໂທ**</u> ມີ:

ພ.ທ. ວ່າງເນັ້ງ, ພ.ທ. ວ່າງກົວ, ພ.ທ. ບລົງທ່າວ, ພ.ທ. ຢົ້ວຕຣີ ວ່າງ, ພ.ທ. ນົວເກົ້າ, ພ.ທ. ຈີງກົວວື້, ພ.ທ. ນົວເຊັ້ງ, ພ.ທ. ຢາງຈື້, ພ.ທ. ເນັ່ງຢົວ ວ່າງ, ພ.ທ. ຢົ້ວວ່າງກາວ, ພ.ທ. ວ່າງຢີ, ພ.ທ. ຕຸພື້ ວ່າງ, ພ.ທ. ນົວທົ້ງ, ພ.ທ. ລີນູ, ພ.ທ. ເນັ່ງຢີຢາງ, ພ.ທ. ຈີງເນັ້ງວ່າງ, ພ.ທ. ຈ້າລີ, ພ.ທ. ຈີງຕົວຢາງ, ພ.ທ. ລີເນັ້ງ, ພ.ທ. ລີ ບົລອງ ປະຈ້າ, ພ.ທ. ເສີມພັນ, ພ.ທ. ລີເຢີ (ມາເສັຍຊີວິດຢູ່ເດນເວີດ ສະຫະຣັຖ), ພ.ທ. ຕູ້ ວ່າງ ຢາງ (ຮຽນຈົບໂຮງຮຽນກົດໝາຍທີ່ວຽງຈັນທນ໌, ປະເທສລາວ) ປະຈຸບັນຢູ່ປະເທສຝລັ່ງເສສ ແລະ ພ.ທ. ທ້າວນາ. ຍັງອີກຫລາຍຄົນບໍ່ຈຳຊື່ໄດ້.

## ການປະກອບກຳລັງທະຫາຣ 1951-1964

ກອງທະຫາຣພາຄ 2 ໄດ້ປະກອບຂື້ນດັ່ງນີ້:

<u>ກ່ອນປີ 1961</u>
ມີກອງພັນ (BV) 21, 22, 23, 24, 25 ແມ່ນການຈັດຕັ້ງຢູ່ແຂວງຊຽງຂວາງ; ກອງພັນ 26, 27 ແລະ 28 ການຈັດຕັ້ງຢູ່ແຂວງຫົວພັນ (ຊຳເໜືອ). ນອກຈາກນີ້ ຍັງມີທະຫາຣ ກອມມັງໂດ, ແລະ ໜ່ວຍທະຫາຣບ້ານ ເພື່ອຕໍ່ສູ້ ກັບສັດຕຣູຂອງຊາຕ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຫລັງຈາກປີ 1964

ທະຫາຣໄທ໌ຍໄດ້ໄປຝຶກທະຫາຣລາວ ຢູ່ພາຄສອງ ແລ້ວໄດ້ຈັດຕັ້ງເປັນກອງພັນຄື: SGU 201, 202, 203, 204, 205, 206, 207, 208, 209, ປ້ອງກັນແຂວຊຽງຂວາງ; ແຂວງຫົວພັນ ມີ ກອງພັນ SGU 226, 227 ແລະ 228.

ຫລັງຈາກທີ່ໄດ້ເສັຍ ພູຜາທີ LS85

ກຳລັງ ຂອງແຂວງຫົວພັນໄດ້ຍ້າຍໄປຢູ່ ໃນແຂວງຊຽງຂວາງ ເລີ້ມປີ 1970 ໄດ້ຈັດຂື້ນເປັນ ກຣົມ ດັ່ງນີ້: ກຣົມ 21, 22, 23, 24, 25, 26, 27 ແລະ 28. ຜ.ບ. ກອງພົນແມ່ນ ທ່ານ ພ.ອ. ດວງຕາ ແຕ່ຜູ້ກ່ຽວ ບໍ່ໄດ້ປະຈຳໜ້າທີ່. ໃນປີ 1972 ແມ່ນທ່ານ ວ່າງເຢີ ເປັນ ຜ.ບ. ກອງພົນ ທີ່ສອງ ໄດ້ເຂົ້າໄປໂຈມຕີ ທົ່ງໄຫ ຫີນ ແຕ່ໄປບໍ່ຮອດ ຍ້ອນມີການເຊັນສັນຍາ ລະຫວ່າງສະຫະຣັຖແລະວຽດນາມເໜືອໃນປີ 1973 ທີ່ ປາຣີ ຝຣັ່ງເສສ.

- ທ່ານ ວ່າງເຢີ ຜ.ບ. ກຣົມ 21. 1970-1971 ແລະ 1972-1973 ຜ.ບ. ກອງພົນທີ່ 2
- ທ່ານ ລີບູ ຜ.ບ. ກຣົມ 22. 1970-1972 (ຜູ້ກ່ຽວເສັຍຊີວິດຢູ່ສູນສັມະນາ ວຽງໄຊ ແຂວງ ຫົວພັນ).
- ທ່ານ ພ ອ. ຊົ້ງເລັ່ງ ຊົງ ຜ.ບ. ກຣົມ 23 ປີ 1970 -1971. ແລ້ວ ແມ່ນ ພ.ທ. ວ່າງຢົວ ຜ.ບ. ກຣົມ 23 ເລີ່ມແຕ່ປີ 1971-1972, ຖືກບາດເຈັບໄດ້ປ່ຽນໃຫ້ ພ.ອ. ລີເຕັ້ງ ເປັນ ຜ.ບ. ກຣົມ 23 ແຕ່ 1972-1975.
- ພ.ທ. ມົວເກົ້າ ຜ.ບ. ກຣົມ 24. 1970-1973
- ພ.ທ. ວ່າງກົວ ຜ.ບ. ກຣົມ 25. 1970-1973
- ພ.ອ. ລີເລົ່າ ຜ.ບ. ກຣົມ 26. 1970-1973
- ພ.ທ. ຈົງກົວ ວື້ ຜ.ບ. ກຣົມ 27 ຕັ້ງຢູ່ເມືອງໝອກ (LS46) ປີ 1973-1975 ເສັຍຊີວິດຢູ່ລາວ ເພາະໜີບໍ່ໄດ້.
- ພ.ອ. ເຈີປາວມົວ ຜ.ບ ກຣົມ 28 ຕັ້ງຢູ່ບວມຫລົງ (LS32) ແຕ່ປີ 1970-1975 . ໃນປີ 1976 ໄດ້ ກັບໄປຕໍ່ສູ້ ເພື່ອນຳພາລູກນ້ອງອອກ ແຕ່ໄດ້ເສັຍຊີວິດ ຢູ່ປ່າໃນລາວ ໃນປີ 1994.

ທ່ານ ວ່າງເຢີ ໄດ້ມາເປັນຫົວໜ້າໂຄງການພັທນາ ພາຄ 2 ໃນປີ 1973-1975. ໃນປີ 1973 ຫາ 1975 ແມ່ນ ທ່ານ ພ.ອ. ມົວສື ໄດ້ມາເປັນ ຜ.ບ. ກອງພົນ ທີ່ 2 ທ່ານ ພ.ທ. ວ່າງເນັ້ງ ເປັນຜູ້ຮອງ ສູນກາງຕັ້ງຢູ່ ສາລາ ພູຄູນ ທາງຄົບ ຖນົນເລຂທີ່ 13 ແລະ ຖນົນເລຂທີ່ 7.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1973-1974. ມີການຈັດຕັ້ງຣັຖບາລປະສົມສອງຝ່າຍ ໄດ້ມີການປົດປ່ອຍ ທະຫາຣອອກ ໄປທຳມາຫາກິນ, ໄປຮຽນຄ້າຂາຍ, ກັບໄປຝຶກຝົນອາຊີບ ແລະ ການສຶກສາຕ່າງໆ. ກຳລັງທັພພາຄ 2 ໄດ້ ລົດລົງມາ ຈາກການຕັດການຊ່ວຍເຫລືອຂອງສະຫະຣັຖ ແລະຄວາມໄຝ່ຝັນສັນຕິພາບ ແຕ່ຝ່າຍ ສ.ປ.ປ.ລ. ເປັນຝ່າຍສວຍໂອກາສ ເອົາແກວມາຊ່ວຍ ໄດ້ມ້າງເພສັນຍາສັນຕິພາບ ເພາະສະຫະຣັຖ ຈຳ ເປັນຕ້ອງຖອຍອອກຈາກສົງຄາມການເມືອງໃນອິນດູຈີນຍ້ອນເຫຕດັ່ງນີ້:

- ການເດີນຂະບວນຂອງປະຊາຊົນອາເມຣິກາ ຢູ່ໃນສະຫາຣັຖ ທີ່ບໍ່ເຫັນດີ ໃຫ້ສະຫະຣັຖ ດຳເນີນສົງຄາມຕໍ່ຢູ່ໃນອິນດູຈີນ.
- ຈີນແດງ ແລະ ຣັຊເຊັຍມີການຄັດແຍ້ງກັນໃນບັນຫາຊາຍແດນ ແລະ ມີການຕໍ່ສູ້ກັນ.
- ຣັຊເຊັຍຕ້ອງເພີ້ມອາວຸທອັນທັນສມັຍໃຫ້ວຽດນາມເໜືອ ເພື່ອປ້ອງກັນ ການໂຈມຕີຈາກສະຫະຣັຖ. (ໃນປີ 1971 ປະທານາທິບໍດີ ນິກສັນ ໄດ້ຕັດສິນໃຈເອົາລະເບີດໄປໃສ່ທ່າເຮືອ ໄຮຟອງ ແລະ ສົ່ງກຳລັງທະຫານເພີ່ມເຕີມ ເຂົ້າໄປປະເທດວຽດນາມ).

ການຖອຍອອກຂອງສະຫະຣັຖ ມີປະໂຍດຫລາຍ ປ່ອຍໃຫ້ຈີນແດງເປັນຜູ້ແກ້ໄຂ ແລະ ເຮັດໃຫ້ໂລກຄອມມຸຍນິສຕ໌ ແຕກແຍກກັນເອງ. ສຖານະການໄດ້ເຮັດໃຫ້ຝ່າຍ ຄ.ມ.ນ. ອ່ານ ອອກ ວ່າ ແນ່ນອນສະຫະຣັຖ ບໍ່ມີທາງຈະກັບໄປພົວພັນສົງຄາມຢູ່ໃນອິນດູຈີນອີກ. ຝ່າຍ ຄ.ມ.ນ. ວຽດນາມເໜືອ ຈຶ່ງຕຽມແຜນຍຶດເອົາອິນດູຈີນ ຢ່າງບໍ່ມີປະເທສໃດຊ່ວຍໄດ້. ຄ.ມ.ນ. ຈຶ່ງໄດ້ໃຊ້ ເລ່ຫລ່ຽມ;ໃຊ້ກຳລັງ ທະຫາຣຍຶດອຳນາຕໃຫ້ໄດ້ຢ່າງເດັດຂາດ ໂດຍເຮັດໃຫ້ຣັຖບາລປະສົມສອງຝ່າຍ ບໍ່ມີທາງແກ້ໄຂໄດ້. ໃຫ້ໄກສອນພົມວິຫານ ຈຶ່ງມີສິດເຊັນເມືອງລາວໃຫ້ແກວມາຄູມທຸກຢ່າງ ພາໃຫ້ປະຊາຊົນ ຫລາຍຮ້ອຍ ພັນຄົນເສັຍຊີວິດ, ຖືກຈັບໄປສັມມະນາ ຫລືຕ້ອງອົພະຍົບໜີ ຍ້ອນປະຊາຊົນລາວມີຈຳກັດ ເປັນປະເທສນ້ອຍໆບໍ່ສາມາດປ້ອງ ກັນຕົນເອງ.

# ພາຄທີ່ 7.

# ການສູ້ຮົບກັບວຽດນາມເໜືອ

ໃນປີ 1959-1972, ວຽດນາມຄອມມຸຍນິສຕ໌ ບໍ່ນັບຖືສັນຍາທີ່ໄດ້ເຊັນກັນໄວ້, ໄດ້ໃຊ້ພື້ນແຜນດິນລາວເປັນ ທາງຜ່ານໄປເຮັດເສິກຢູ່ວຽດນາມໃຕ້ ໄດ້ສນັບສນຸນຝ່າຍລາວຄອມມຸຍນິສຕ໌ ໂຈມຕີທີ່ໝັ້ນຂອງຝ່າຍຣັຖບາລເປັນກາງຂອງລາວອັນມີສເດັຈເຈົ້າສູວັນນາພູມາ ເປັນນາຍົກຣັຖມົນຕຣີ ຢ່າງຮູນແຮງໂດຍໃຊ້ທະຫາຣຫລາຍກອງພົນໂຈມຕີ ພາຄ 2, ພາຄ 3 ແລະພາຄ 4. ຍ້ອນວ່າ ຫລັງຈາກປີ1969, ສະຫາພາບໂຊວຽດໄດ້ໃຫ້ການຊ່ວຍເຫລືອ ດ້ານອາວຸທໃຫ້ວຽດນາມເໜືອຢ່າງບໍ່ໜ້າເຊື່ອ ເພື່ອຕໍ່ສູ້ກັບ ສົງຄາມສະຫາຣັຖໃນອິນດູຈີນຄື: ຣົຖຖັງຂນາດໜັກ, ຂນາດເບົາ ຣົຖຫູ້ມເກາະ, ຣົຖຂົນສົ່ງທະຫາຣ, ປືນຕໍ່


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຕ້ານອາກາສ, ປືນໃຫ່ຍທຸກຊນິດ ຄື: 86 ມ/ມ, 122 ມ/ມ, 130 ມ/ມ, ພ້ອມຈະຣວດ 122 ມ/ມ ແລະ ຣິຖຂີນສິ່ງ ປືນ ປ.ຕ.ອ. 12.8 ມ/ມ, 14.6 ມ/ມ, 25 ມ/ມ, 37 ມ/ມ, 57 ມ/ມ, 76 ມ/ມ ແລະເຄື່ອງບິນ ມິກ (MIG) ເພື່ອປ້ອງກັນທາງອາກາສໃນວຽດນາມເໜືອ ແລະຕໍ່ຕ້ານຝ່າຍສະຫາຣັຖ ຈົນສະຫາຣັຖຕ້ອງ ໄດ້ຖິ້ມລະເບີດ ປິດທາງເຂົ້າມາຈາກທະເລ ຢູ່ໃນທ່າເຮືອຮາຍຝອງ ໄກ້ຮ່າໂນ້ຍ ວຽດນາມເໜືອ. ພວກສັດ ຕຣູ ຍັງມີຈຣວດຕໍ່ຕ້ານອາກາສຍານຊີ່ (SAM = Soil-Air-Missile) ທີ່ເຮັດ ໃຫ້ພວກເຂົາມີກຳລັງເໜືອ ກ່ວາ ຝ່າຍມິດຫລາຍເທົ່າ ດ້ານທະຫາຣ ແລະ ດ້ານອາວຸທ ເພາະສະນັ້ນ ພາຄ 2 ແລະ ຣາຊອານາຈັກ ລາວຈຶ່ງຕົກຢູ່ໃນການໂຈມຕີ ຢ່າງໜັກຂອງວຽດນາມເໜືອ.

ໃນເວລານີ້ ພາຄ 2 ມີກຳລັງທະຫາຣເກືອບສອງກຣົມ (ປະມານ 10 ພັນຄົນ) ເພື່ອປ້ອງກັນແຂວງຫົວພັນ ແລະແຂວງຊຽງຂວາງ. ການປ່ຽນແປງນີ້ ຜູ້ບັນຊາພາຄ ຈຶ່ງໄດ້ໃຊ້ຄວາມພະຍາຍາມ ຕາມຄວາມສາມາດ ຕ້ານການຂຍາຍຕົວຂອງວຽດນາມເໜືອໄວ້. ທ່ານນາຍພົນຕຣີ ວ່າງປາວ ແລະທະຫາຣທຸກພາຄ ໃນລາວ ຈຶ່ງໄດ້ຈັດຕັ້ງປະກອບກຳລັງທະຫາຣ ເປັນກອງພົນຂອງຣາຊອານາຈັກລາວ ເລີ່ມແຕ່ປີ 1970. ໃນຣາຊ ອານາຈັກລາວໄດ້ແບ່ງເປັນ 5 ພາຄ ແຕ່ລະພາຄ ປະກອບເປັນໜຶ່ງກອງພົນ ຈຶ່ງ ມີ 5 ກອງພົນແມ່ນຢູ່ໃນ ການຊ່ວຍເຫລືອຂອງສະຫາຣັຖ. ໃນເມື່ອເຫັນວ່າສັດຕຣູມີກຳລັງພົລ, ມີອາວຸດເໜືອກວ່າຝ່າຍມິດ ຫລາຍ ເທົ່າ ຣັຖະບາລລາວຝ່າຍວຽງຈັນທນ໌ຈຶ່ງໄດ້ຂໍການຊ່ວຍເຫລືອທາງອາກາສ ຈາກສະຫາຣັຖ ເພື່ອ ຖິ້ມລະ ເບີດ ແລະໂຈມຕີສັດຕຣູ ມາຈາກທາງອາກາສ ສະຫາຣັຖໄດ້ປະຕິບັດງານຢ່າງດີ ຊ່ວຍຝ່າຍ ວຽງຈັນທນ໌ ຈຶ່ງຢູ່ລອດມາເຖິງປີ 1975.



*<u>ຮູບທີ່ 112</u>. ເຄື່ອງບິນB52 ກຳລັງຖິ້ມລະເບີດໃສ່ສັດຕຣູ (B52)*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເມື່ອທ່ານນາຍພົນຕຣີ ວ່າງປາວ ໄດ້ຮັບການຊ່ວຍເຫລືອຈາກສະຫາຣັຖເພີ່ມການໂຈມຕີທາງອາກາສ ໃຫ້ແກ່ພາຄ 2 ທ່ານ ຈຶ່ງໄດ້ຕັດສິນໃຈວາງແຜນລຸກຮົບ ໂຈມຕີສັດຕຣູເຂົ້າໄປໃນທົ່ງໄຫຫີນ ຄັ້ງທີ່ສອງ. ແຜນຮົບເທື່ອນີ້ ເອີ້ນວ່າແຜນ "ທະນົງກຽດ". ທ່ານນາຍພົນວ່າງປາວ ໄດ້ຮອ້ງຂໍກຳລັງທະຫາຣມາຈາກ ຣາຊອານາຈັກໄທ໌ຍ ເຂົ້າໄປຊ່ວຍຮັກສາບໍຣິເວນລ່ອງແຈ້ງ ເພາະທະຫາຣພາຄ 2 ສ່ວນຫລາຍ ໄດ້ອອກ ໄປຕໍ່ສູ້ສັດຕຣູຢູ່ແນວໜ້າ. ເລີ່ມຕົ້ນເດືອນມິຖຸນາ (June) 1969, ທ່ານນາຍພົນໄດ້ສົ່ງກຳລັງອອກໄປ ໂຈມຕີ ສັດຕຣູ ດັ່ງນີ້:

- ສາຍທີ່ໜຶ່ງຕີເຂົ້າຊຳທອງ, ໄປຫາພູຫລວງມາດ, ບ້ານນາ, ພູເສີ້, ເມືອງພົ້ນ, ເປົ້າໝາຍສຸດທ້າຍ ແມ່ນ ທົ່ງໄຫຫີນ;
- ສາຍທີ່ສອງ ໂຈມຕີສັດຕຣູ ໄປຫາເມືອງສຸຍ, ເມື່ອຍຶດເມືອງສຸຍໄດ້ແລ້ວ ເປົ້າໝາຍ ຕໍ່ໄປແມ່ນ ເຂົ້າໄປກວດລ້າງແຖວລາດບວກ ດ້ານຕາວັນຕົກຂອງທົ່ງໄຫຫີນ ສູນກາງຂອງຄອມ ມຸຍນິສຕ໌.

ການບຸກເຂົ້າເມືອງສຸຍເທື່ອນີ້ ໄດ້ເສັຍນັກບິນຜູ້ກ້າຫານ ຣ.ອ.ອ. ລີລີ ແລະ ຣ.ທ.ອ. ລໍເນັ້ງ. ລີລີ ແມ່ນນັກ ບິນທີ່ໃຫ້ກຳລັງໃຈແກ່ ທ່ານນາຍພົລຕຣີ ວ່າງປາວ ຫລາຍທີ່ສຸດ, ແລະ ໄດ້ຮັບການສນັບສນຸນ ຈາກເຄື່ອງ ບິນ ເບ 52, ເຄື່ອງບິນໄອພົ່ນ ແອຟ (F4, Fantom F111), ເຄື່ອງບິນ ເອອວນອີ (A1E) ແລະຝູ່ງບິນ T-28 ຂອງນັກບິນລາວ ທີ່ໄດ້ອອກໄປສນັບສນຸນຊ່ວຍຄູ້ມກັນການເຄື່ອນທີ່ ແລະກໍໄດ້ຮັບການໜູນຫລັງ ຈາກກຳລັງທະຫາຣຣາຊອານາຈັກໄທຍ໌ ເຂົ້າໄປຊ່ວຍ. ການລຸກຮົບເຂົ້າໄປເທື່ອນີ້ ໄດ້ຜົລດີ ພໍສົມຄວນ




*<u>ຮູບທີ່ 113</u>. ຍົນໄອພົ່ນ ເອຟ F4 ຂອງສະຫະຣັຖ ອາເມຣິກາ ທີ່ ໃຫ້ການສນັບສນຸນ ທາງອາກາສ ຊ່ວຍ ຝ່າຍຣັຖບາລວຽງຈັນທນ໌ ຍົນຕ໌ເອຟ4ກຳລັງ ຖິ້ມລະເບີດ ໃສ່ ທີ່ໝັ້ນຂອງວຽດນາມເໜືອໃນສນາມລົບ.*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຝ່າຍມິດຍຶດໄດ້ທົ່ງໄຫຫີນ ໄດ້ທຳລາຍປືນໃຫ່ຍ, ຣົຖຖັງ, ສາງອາວຸທຂອງສັດຕຣູ ໄດ້ທຳລາຍສັດ ຕຣູໄປຫລາຍພັນຄົນ ຍືດໄດ້ທົ່ງໄຫຫີນ ແລະຕັ້ງເປັນທີ່ໝັ້ນໄວ້, ໄດ້ໄປ ສະຫລອງບູນຈຸງ ຢູ່ທົ່ງໄຫຫີນ ເດືອນພຶສຈິກາ ປີ 1970. ທ່ານນາຍພົລຕຣີ ວ່າງປາວ ແລະຜູ້ນຳທະຫາຣໄທຍ໌ ໄດ້ວາງແຜນປ້ອງກັນທົ່ງໄຫຫີນຢ່າງດີ ຄື: ແຜນປ້ອງ ກັນຣູບ 163 ແລະ 114 ດັ່ງທີ່ອະທິບາຍຢູ່ຂ້າງລຸ່ມນີ້.

- ນື່ງກອງພັນທະຫາຣໄທຍ໌ ຍຶດພູເຕີງ, ແລະໄດ້ຂຸດຂູມປ້ອງກັນຢ່າງດີ;
- ນື່ງກອງພັນ ປ້ອງກັນພູເກັ້ງ ແລະ ຂຸດຂູມປ້ອງກັນຢ່າງດີ;
- ນື່ງ ກອງພັນທະຫາຣໄທຍ໌ ຍຶດພູເຊີ້ ແລະ ຂຸດຂູມປ້ອງກັນຢ່າງດີ;
- ນື່ງກອງພັນທະຫາຣໄທຍ໌ ຍຶດພູແຄ ແລະ ຕັ້ງປືນໃຫ່ຍ 155 ສີ່ ກະບອກ ແລະ 105 ສີ່ກະບອກ;
- ນື່ງກຣົມທະຫາຣໄທຍ໌ ຕັ້ງຢູ່ເມືອງພັ້ນ ລະຫວ່າງກາງ ພູເກັ້ງແລະພູເຊີ້, ພາຣະກິດແມ່ນ ເຄື່ອນທີ່ໄປມາໄດ້ໃນລະຫວ່າງ ສີ່ພູ ທີ່ກ່າວມາເທົ່ງນີ້ ເປັນກຳລັງ ໜູນຫລັງ ເມື່ອຖືກໂຈມຕີ.
- ນື່ງກອງພັນປືນໃຫ່ຍ 105 ມ/ມ 4 ກະບອກ ແລະ 155 ມ/ມ 4 ກະບອກ ຕັ້ງຢູ່ເມືອງພັ້ນ ສາມາດປ້ອງກັນ ຝ່າຍມິດໃນບໍລິເວັນເວນທົ່ງໄຫຫີນ.
- ພາຣະກິດສອງກຣົມທະຫາຣມົ້ງ ພາຄ 2 ແມ່ນເຄື່ອນທີ່ຊອກຫາເປົ້າໝາຍຂອງສັດຕູ, ຊອມເບິ່ງການເຄື່ອນໄຫ່ວຂອງສັດຕຣູແລ້ວ ຂໍເຄື່ອງບິນຖີ້ມລະເບີດໃສ່ ຫລື ຂໍປືນໃຫ່ຍຝ່າຍມິດທຳລາຍ;
- ນື່ງກອງພັນທະຫາຣເຜົ່າມົ້ງ ພາຄ 2 ຕັ້ງຢູ່ເທີງພູຣອດ; ປ້ອງກັນທາງມາຈາກຂັງໄຂ ແລະທາງເຂົ້າໄປຫາລາດບອກ.

ລະຫວ່າງເດືອນມັງກອນ ຫາ ເດືອນມີນາ ປີ 1971, ອາກາສເລີ່ມມຶດເຮັດໃຫ້ການຊ່ວຍເຫລືອທາງ ອາກາສບໍ່ໄດ້ຜົລດີ ແຕ່ການເຄື່ອນທີ່ຂອງຣົຖແລະກຳລັງຂອງສັດຕຣູ ກໍສະດວກດີຂື້ນ ຈື່ງເປັນໂອກາສ ໃຫ້ສັດຕຣູ ໄດ້ວາງແຜນໂຈມຕີຝ່າຍມິຕທາງພາຄພື້ນດິນທຸກຈຸດ ໄດ້ເຮັດໃຫ້ທະຫາຣຝ່າຍມິດ ຄື: ກຣົມທະຫາຣມົ້ງ ທີ່ ຊື້ງຊອມເບິ່ງສັດຕຣູ ນັ້ນຖືກໂຈມຕີໜັກ ໄດ້ແຕກກະຈັດກະຈາຍ ເຕົ້າໂຮມກັນບໍ່ໄດ້. ເປັນໂອກາສໃຫ້ສັດຕຣູໄດ້ໂຈມຝ່າຍມິຕທຸກຈຸດໃນທົ່ງໄຫຫີນ ດ້ວຍເລີ່ມຕົ້ນໂຈມຕີພູທຸກໜ່ວຍ ທີ່ຝ່າຍມິຕໄດ້ຕັ້ງເປັນທີ່ໝັ້ນຢູ່ນັ້ນ ໄວ້ພ້ອມໆກັນ ແລະໄດ້ຍິງປືນໃຫ່ຍ ຈະຣວດຄູມທະຫາຣໄທ໌ຍທຸກຈຸດໃນທົ່ງໄຫຫີນ ເຮັດໃຫ້ຣວບລວມກັນບໍ່ໄດ້.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




<u>ແຜນທີ່ 114</u>. *ແຜນທະນິງກຽດ ເພື່ອເຂົ້າໄປຍຶດພື້ນທີ່ທີ່ໄດ້ຕົກໃຫ້ສັດຕຣູວຽດນາມເໜືອ ເລີ່ມ ເດືອນ 7 ປີ 1969, ໄດ້ໄປສະຫລອງ ບູນຈຽງປີໃໝ່ ເດືອນ ພຶດສະພາ 1970 ແຕ່ໄດ້ເສັຍຄືນໃຫ້ສັດຕຣູເດືອນ ມີນາປີ 1971.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*ແຜນທີ່ 115. ແຜນປ້ອງ ກັນທົ່ງໄຫຫີນ ປີ 1970 (1) ແມ່ນກອງທັບໄທຍ໌. (2)ແມ່ນທະຫານມົ້ງພາກສອງ. ສັດຕູໄດ້ສົ່ງສອງ ກອງພົນ 312 ແລະ 316 ບຸກທົ່ງໄຫຫີນ ແລະ ຕຽມຈະເຂົ້າໄປເອົາລ່ອງແຈ້ງ ໃຫ້ໄດ້ ແຕ່ໂຊກດີ ເບ 52 ໄດ້ຖິ້ມບອມໃສ່ຊ່ວຍ ຈຶ່ງບໍເສັຍ ລ່ອງແຈ້ງ ແຕ່ ສັດຕູ ໄດ້ເຮັດໃຫ້ລ່ອງແຈ້ງ ເປັນບ້ານຫ້າງດິນເຕີບ.*

ເມື່ອສັດຕຣູຍຶດໄດ້ພູສຳຄັນຫລາຍພູແລ້ວ ຝ່າຍສັດຕຣູກໍເປີດສາກບຸກໂຈມຕີກຳລັງທະຫານ ໄທຍ໌ໃນທົ່ງໄຫຫີນຈຶ່ງໄດ້ເສັຍ ທົ່ງໄຫຫີນຄືນໃຫ້ສັດຕຣູ ພ້ອມທັງໄດ້ນຳໂຈມຕີ ຝ່າຍມິດຈົນເຖິງລ່ອງແຈ້ງ ພາໃຫ້ ລ່ອງແຈ້ງກາຍເປັນບ້ານຮ້າງເກືອບໝົດປີ ໃນປີ 1971.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ວຽດນາມເໜືອໄດ້ສົ່ງສອງກອງພົນບຸກໂຈມຕີທົ່ງໄຫຫີນດັ່ງນີ້: ກອງພົນ 316, ພ້ອມໜຶ່ງກຣົມປືນໃຫ່ຍ, ຣົຖຖັງ ຕີຈາກບ້ານບານ ຕາມຖນົນເລຂທີ່ 7 ເຂົ້າໂຈມຕີ ພູຮວດ; ພູເກັງ ແລະ ທົ່ງໄຫຫີນ. ກອງພົນ 312 ແລະ ຫລາຍກອງພັນດັດກົງ (ໜ່ວຍກ້າຕາຍ) ຕີມາຈາກຊຽງຂວາງ ຕາມຖນົນເລຂທີ່ 4 ຫາທົ່ງໄຫຫີນ ແມ່ນບຸກໂຈມຕີພູເຕີງ ແລະພູແຄ. ເມື່ອຍຶດໄດ້ພູທີ່ອອ້ມທົ່ງໄຫຫີນແລ້ວ ກໍເລີ່ມກວດລ້າງຝ່າຍມິດທີ່ ຢູ່ໃນທົ່ງໄຫຫີນ ສ່ວນຫລາຍແມ່ນທະຫາຣໄທຍ໌ ຜູ້ບໍ່ຮູ້ທາງໜີຕອ້ງຕໍ່ສູ້ດ້ວຍຊີວິດ ຫລືຖືກຈັບ. ປະມານຕົ້ນເດືອນມີນາ (March) 1971 ຫລັງຈາກຝ່າຍມິດໄດ້ແຕກອອກຈາກທົ່ງໄຫຫີນແລ້ວ ສັດຕຣູໄດ້ໄລ່ຕິດຕາມຝ່າຍມິດ ແລະຫວັງຈະຍຶດເອົາລອ່ງແຈ້ງໃຫ້ໄດ້. ສັດຕຣູໄດ້ວາງແຜນບຸກໂຈມຕີລ່ອງແຈ້ງ ດັ່ງນີ້ (ເບິ່ງຕາມແຜນທີ່ # 112 ແລະ 113)

- ກອງພົນ 316 ພ້ອມໜ່ວຍກ້າຕາຍ ໜຶ່ງກຣົມໂຈມຕີຈາກ ບ້ານນາ (LS15) ລົງຕາມຫວ້ຍນ້ຳຈອງ ເຂົ້າໃສ່ຕີນພູຜ່າເທົ້າ ເພື່ອຕັດຫລັງຝ່າຍມິດດ້ານຕາວັນຕົກ. ຝ່າຍມິດໄດ້ຊຸ້ມຊອນຕິດຕາມເບິ່ງ ເມື່ອເຫັນເຂົ້າມາເຖິງຫວ້ຍນ້ຳຈອງ ຕຽມຈະຂຶ້ນຜາເທົ້າ ຫາຊຳທອງ, ທ່ານນາຍພົລວ່າງປາວ ແລະ ທ່ານເຢຣີ ໄດ້ຂໍຍົນຕ໌ ບີ 52 ສອງລຳຖິ້ມລະເບີດ ຈາກທິສໃຕ້ຫາທິສເໜືອ ແລະ ສັ່ງຍົນຕ໌ຖິ້ມລະເບີດ ເອຟ 4 (F4) ຖິ້ມລະເບີດ ຊີບີຢູ (CBU) ໃສ່ ໄດ້ເຮັດໃຫ້ກອງພົລແກວ 316 ທີ່ກຳລັງມາເຖິງຫ້ວຍນ້ຳຈອງ ດັບສູນເກືອບໝົດກອງພົນ.

ນ້ຳຈອງເປັນຫວ້ຍນ້ຳ ໄຫລຜ່ານຕີນພູຜາເທົ້າ ແລະພູຜາຈອງໄປສູ່ແມ່ນ້ຳງື່ມ. ຖ້າບໍ່ມີ ບີ 52 (B52) ແລະ ເອຝ 4 (F4) ຖິ້ມລະເບີດ ເທື່ອນີ້ ແມ່ນລ່ອງແຈ້ງຕ້ອງເສັຍແນ່ນອນ ເພາະແກວຄອມມຸຍນິສຕ໌ໄດ້ສົ່ງກຳລັງເປັນສອງຂະບວນ ກອງພົລສຳຄັນແມ່ນ ກອງພົນ 316 ທີ່ຖືກບີ 52 ຖລົ່ມ ກອງພົລນີ້ມີແຜນດີ ຈຶ່ງເຂົ້າທາງຊຳທອງ ເພື່ອຕັດຫລັງຝ່າຍມິດ ເພາະເບື້ອງຕາວັນຕົກຂອງລ່ອງແຈ້ງໄປຫາຊຳທອງ ເປັນພູຜາສູງ ມີບ່ອນຫລົ້ຊອ້ນຫລາຍ, ຍາກທີ່ຈະຕີເອົາຄືນໄດ້, ນອກຈາກນີ້ ຝ່າຍມິດກໍບໍ່ໄດ້ປ້ອງກັນແໜ້ນໜາໃຫ້ດີອີກ ໂຊກດີ ຍົນຕ໌ໄດ້ຖິ້ມລະເບີດໃສ່ກ່ອນຈຶ່ງໄດ້ທັກຫລັງໄປ.

- ກອງພົນ 312 ແລະ ຫລາຍກອງພັນ ດັກກົງ ແຍກກັນເປັນ ສອງສາຍຄື:
  - -ກ/ ສາຍທີ່ນຶ່ງ ພ້ອມອາວຸທໜັກ ແລະຣົຖຖັງ ເຂົ້າມາທາງກາງ ຈາກລາດແສນ ບ້ານພາ ຫາພູຫລວງມາດ ແລ້ວບ້ານຫີນຕັ້ງ, (LS74.)
  - -ຂ/ ສາຍສອງ ກວດລ້າງຝ່າຍມິດຕາມປ່າດົງ (LS05) ຫາພູເບັ້ຍ ລົງໄປໃສ່ ຜາຂາວ (LS14) ແລ້ວແມ່ນ ລ້ອງແຈ້ງ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com







*<u>ແຜນທີ່ 116</u> .ຕົ້ນເດືອນກູມພາ beginning of March 1971 ສັດຕຣູໄດ້ສົ່ງສອງກອງພົນ 1 ກອງພົນ ຈາກຖນົນເລຂທີ່ 7 ພ້ອມກັບ 1 ກຣົມປືນ ໃຫ່ຍ, ຣົຖຖັງ ແລະ 1 ກອງພົນມາຈາກຖນົນເລຂທີ່ 4 ເຂົ້າໂຈມຕີທົ່ງໄຫຫີນ ແລະບຸກເຂົ້າ ໄປເກືອບ ຮອດລ່ອງແຈ້ງ ແຕ່ໂຊກດີໜ່ວຍຕິດຕາມ ການເຄື່ອນໄຫວຂອງສັດຕຣູ ໄດ້ຂໍຮອ້ງໃຫ້ສົ່ງເຄື່ອງບິນໄປຖີ້ມລະເບີດ. ບີ 52 (B. 52) ໄດ້ຖີ້ມລະເບີດໃສ່ ເຮັດໃຫ້ກອງພົນ 316 ລົ້ມໂຈມເກືອບໝົດ ແຜນເຂົ້າໂຈມຕີລ່ອງແຈ້ງ ຈຶ່ງບໍ່ບັນລຸຜົລ ຝ່າຍ ມິດຈຶ່ງໄດ້ຢູ່ຈົນຮອດເດືອນພຶດສະພາ 14 ປີ 1975.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສ່ວນໜຶ່ງຂອງ ກອງພົລ 312 ພ້ອມດ້ວຍຣົຖຖັງ ແລະອາວຸດນັກ 130 ມ/ມ, 122 ມ/ມ, 86 ມ/ມ ຕີຈາກທົ່ງໄຫຫີນມາໃສ່ຫີນຕັ້ງ, ພູພາໄຊ, ນ້ຳຜາ ແລະຜາຂາວ ມາໄດ້ພຽງແຕ່ຮອດນ້ຳຜາ ກໍຖືກ ເຕ-28 ເຄື່ອງບິນໄອພົ່ນ (F4 & F111) ໂຈມຕີຖິ້ມລະເບີດໃສ່. ເຫລືອໜຶ່ງ ກອງຮ້ອຍໄດ້ໄປຮອດເທິງພູພະຣາຊວັງ ແລະໜຶ່ງກອງພັນແກວ ມາເຖິງພູອາໂປໂລ ພູຜາດ້ານຕາວັນອອກຂອງລ່ອງແຈ້ງ. ຝ່າຍມິດໄດ້ບຸກໂຈມຕີ ໂຕ້ຕອບເກືອບຮອດເດືອນ ກໍຖອຍກັບໄປເພາະກຳລັງມາຈາກຊຳທອງຫລົ້ມເຫລວ ລ່ອງແຈ້ງຈຶ່ງປອດພັຍ.




*<u>ແຜນທີ່ 117</u>. ສັດຕຣູໄດ້ສົ່ງ ສອງກອງພົນ 312 ແລະ 316 ມາບຸກລ່ອງແຈ້ງ ເຮັດໃຫ້ລ່ອງແຈ້ງ ກາຍເປັນບ້ານຫ້າງເກືອບໝົດປີ ໃນ 1971.*

ກຣົມ 174 ແມ່ນກຣົມປະໃຈ ແລະ ກຣົມ 141 ແມ່ນກຣົມປະສົມເຜົ່າຕ່າງໆ ຂອງວຽດນາມເໜືອເປັນກຳລັງທີ່ຮັກສາປ້ອງກັນທົ່ງໄຫຫີນ ທີ່ຫາກໍຍຶດໄດ້ໃໝ່ໆ ຈາກທະຫາຣຂອງທ່ານນາຍພົນຕຣີ ວ່າງປາວ. ການຊ່ວຍເຫລືອທາງອາກາສ ໄດ້ສ້າງຜົລເສັຍຫາຍໃຫ້ສັດຕູແກວໜັກທີ່ສຸດ ແລະກໍເປັນກຳລັງໃຈໃຫ້ແກ່ ຝ່າຍມິຕຢ່າງດີ ຫາກຮູ້ວິທີໃຊ້ ແລະ ມີແຜນການໃຊ້ໃຫ້ໄດ້ຜົລ. ສັດຕຣູສັ່ນສະເທືອນຕໍ່ ບີ (B52) ແອເຟີ 111 (F111) ແລະ ການຖິ້ມລະເບີດ ຊີບີຢູ ຂອງໄອພົ່ນ (F4, Sky Rider, A1E and T28) ແລະ ເຕ-28. ແຜນຍຶດລ່ອງແຈ້ງ ຂອງສັດຕຣູຈຶ່ງບໍ່ບັນລຸຜົລ ຕາມໄດ້ຄາດໝາຍໄວ້, ສັດຕຣູໄດ້ພະຍາຍາມ ສົ່ງກອງຫລອນຂອງກຣົມ 866 ມາທຳລາຍທີ່ໝັ້ນຂອງຝ່າຍມິຕຫລາຍບ່ອນ ອ້ອມແອ້ມລ່ອງແຈ້ງ ແຕ່ກໍຖືກໂຈມຕີຍິງໂຕະຕອບຢ່າງໜັກ ແລ້ວໄດ້ຖອຍກັບໄປ, ພາໃຫ້ປີ 1971 ເປັນປີທີ່ປະ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຊາຊິນລ່ອງແຈ້ງ ຈຳເປັນຕ້ອງໄດ້ແຕກຜ່າຍໜີໄປຢູ່ວຽງຈັນ, ນາຊູ, ບ້ານຊ້ອນ ໄດ້ປະໃຫ້ລ່ອງເຈົ້ງ ກາຍເປັນບ້ານຮ້າງເກືອບໝົດປີ 1971.



*ຮູບທີ່ 118. ກຳລັງຝ່າຍມິດ ບຸກຂຶ້ນພູເກັງ ທາງທິດຕາວັນຕົກສ່ຽງໃຕ້ ທົ່ງໄຫຫີນ ໃນຕົ້ນປີ 1970 ໄດ້ເສັຍຄືນໃຫ້ສັດຕຣູ ໃນເດືອນໃນເດືອນມີນາ (March) 1971.*



*ຮູບທີ່ 119. ເປົາເຂົ້າທີ່ຍຶດໄດ້ຢູ່ທົ່ງໄຫຫີນ ໃນປີ 1970*



*ຮູບທີ່ 120. ປືນ 122 ມມ ຂອງວຽດນາມເໜືອ ຍຶດໄດ້ໃນປີ 1970*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 121</u>. ປືນ ອາກາ ທຸກຊນິດຂອງວຽດນາມເໜືອທີ່ຍຶດໄດ້ ປີ 1970*







*<u>ຮູບທີ່ 122</u>. ລະເບີດຊີບີຢູ CBU Bombsທີ່ຍິນໄດ້ຖີ້ມລົງ. <u>ຮູບທີ່ 123</u>.ຈຸດສີແດງໃນແຜນທີ່ ຂອງລາວ ແມ່ນຈຸດທີ່ຖືກລະເບີດ ໜັກສຸດຢູ່ ພາຄ 2, ພາຄ 3 ແລະພາຄ 4 ໃນ1968-1972*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ແຜນຍຶດທົ່ງໄຫຫີນ

(ແຜນຍຶດທົ່ງໄຫຫີນ ຄັ້ງທີ່ສາມຂອງທ່ານ ນາຍພົນ ວ່າງປາວ)

ເມື່ອສະພາບການໄດ້ປ່ຽນແປງ ກໍສໍ່ໃຫ້ຮູ້ວ່າສັດຕຣູກຳລັງເສັຍຂວັນ. ໃນເດືອນ ກໍຣະກົດ (July) ປີ 1971, ທ່ານນາຍພົລຕຣີວ່າງປາວ ຈຶ່ງໄດ້ສັ່ງກຣົມ 21 ແລະກຣົມ26 ເຄື່ອນກຳລັງ ດ້ວຍທາງເຄື່ອງບິນເຮລິໂຄບເຕີ ໄປລົງລາດບວກ ບຸກໂຈມຕີທີ່ໝັ້ນຂອງສັດຕຣູ ຢູ່ຊອງຮັກ ເມືອງເຄິງ. ໄດ້ສັ່ງກຣົມ 22 ແລະ ກຣົມ 24 ເຄື່ອນໄປເສີມກຣົມ 28 ທີ່ບວມຫລົງ (LS32) ດ້ວຍເຄື່ອງບິນເຮລິໂຄບເຕີ, ຈຸດມຸ່ງໝາຍແມ່ນຕຽມເຂົ້າໄປຍຶດລາດບວກ ແລະຕັດທາງຈາກຕາດເປີບເບື້ອງຫລັງຂອງສັດຕຣູ. ເມື່ອລົງຍົນຕ໌ແລ້ວ ກຣົມ 21ແລະ ກຣົມ 26 ໄດ້ຕໍ່ສູ້ກັບສັດຕຣູ ປະມານສາມອາທິສ ໄດ້ເກີດມີບັນຫາດ້ວຍຈຳນວນທະຫາຣຫລາຍຄົນຕີນເປື່ອຍ ຢ່າງບໍ່ໄດ້, ບໍ່ຮູ້ເຫຕຜົນ ວ່າຕີນເປື່ອຍຍ້ອນຫຍັງ, ຕາມຄິດເບິ່ງ:

- ✓ ອາດແມ່ນໃຊ້ເກີບທີ່ເຮັດມາຈາກໄຕຫວັນ ອາດມີເຄມີ ຢູ່ໃນຢາງ ທີ່ໄດ້ເອົາມາເຮັດເກີບ ເພາະປະກົດວ່າຜູ້ທີ່ບໍ່ໃຊ້ເກີບ ມາຈາກໄຕຫວັນນັ້ນ ຕີນບໍ່ເປື່ອຍ ແລະ ບໍ່ມີບັນຫາຫັຽງ.
- ✓ ຕາມໄດ້ວິເຄາະເບິ່ງ ເຫັນວ່າຕີນທະຫາຣເປື່ອຍ ອາດເປັນເພາະຍົນຕ໌ໄດ້ໄປຖິ້ມລະເບີດລົງທົ່ວທຸກແຫ່ງ ໃນບໍຣິເວັນທົ່ງໄຫຫີນ. ບາງທີ ພິສຂອງລະເບີດໄດ້ເຮັດໃຫ້ຕີນເປື່ອຍ ກໍເປັນໄດ້ ເພາະວ່າ ກຣົມ 21 ແລະ ກຣົມ 26 ຍ່າງຕາມທົ່ງ ທີ່ເຕັມໄປດ້ວຍນ້ຳຝົນ ທີ່ເຮັດໃຫ້ເກີບປຽກ ແລະ ແມ່ນ ທົ່ງທີ່ຖືກຍົນຕ໌ ສະຫະ ຣັຖຖິ້ມລະເບີດໃສ່ໜັກທີ່ສຸດໃນໂລກ ກໍວ່າໄດ້.

ກຣົມ 21 ແລະ ກຣົມ 26 ຈຳເປັນຕ້ອງຖອຍອອກ ຍ້ອນທະຫາຣຕີນເປື່ອຍ ຍ່າງບໍ່ໄດ້ ແລະ ກໍຖືກຣົຖຖັງຂອງສັດຕຣູ ໄລ່ເຮັດໃຫ້ຝ່າຍມິຕຕາຍ ເປັນຈຳນວນຫລາຍຄົນ, ສ່ວນນຶ່ງກໍໄດ້ຕົກນ້ຳງື່ມຕາຍ ເພາະແມ່ນຍາມຝົນ ນ້ຳໄຫລແຮງ ຣົຖຖັງໄລ່ຍິງ ຕ້ອງໄດ້ຂ້າມນ້ຳງື່ມ ເພື່ອຫລີກຣົຖຖັງ ຈຶ່ງດິກນ້ຳຕາຍ. ຫລັງຈາກ ກຣົມ 21 ແລະ ກຣົມ 26 ໄດ້ຖອຍອອກແລ້ວ ກຣົມ 22 ແລະ ກຣົມ 24 ກໍໄດ້ຖືກສັດຕຣູໂຈມຕີ ຢ່າງໜັກ ໄດ້ຖອຍກັບໄປຕັ້ງຢູ່ບວມຫລົງ.

<u>ເຂົ້າໂຈມຕີທົ່ງໄຫຫີນຄັ້ງທີ່ ສີ່ ຂອງທ່ານ ນາຍພົນ ວ່າງປາວ</u>

ໃນເດືອນມິຖຸນາ (June) 1972, ພົລຕຣີ ວ່າງປາວ ໄດ້ສັ່ງໃຫ້ກອງພົລ 2 ພ້ອມ ທະຫາຣໄທຍ໌ 1 ກຣົມ, ແລະ ທະຫາຣລາວ ມາຈາກພາຄ 3 ສອງກຣົມຄື: ກຣົມ 33 ແລະ ກຣົມ 35. ໃຫ້ບຸກໂຈມຕີສັດຕຣູໄປໃສ່ທົ່ງໄຫຫີນ. ກຣົມທະຫາຣໄທ໌ຍ ພາຣະກິດແມ່ນ ລໍໄປແທນພື້ນທີ່ທີ່ຍຶດໄດ້. ກອງພົນ 2 ຈຶ່ງໄດ້ເຄື່ອນທີ່ໄປຕາມແຜນດັ່ງນີ້:

- ✓ ກຣົມ 21, 23, 26 ແລະ 35 ເຂົ້າຄັງໄຂ (LS204), ລົງໄປຫາລາດແສນ ເປົ້າໝາຍແມ່ນຍຶດທົ່ງໄຫຫີນໃຫ້ໄດ້.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ✓ ກຣົມ 33 ເປົ້າໝາຍ ໃຫ້ຍຶດພູຜາໄຊ່ຍໃຫ້ໄດ້.
- ✓ ກຣົມ 22 ແລະ ກຣົມ 24 ເປົ້າໝາຍແມ່ນໄປດັດສະກັດທາງລຳລຽງຂອງສັດຕຣູ ຕາມເສັ້ນທາງເລຂທີ່ 7 ລະຫວ່າງຂັງໄຂຫາບ້ານບານ (ເມືອງຄຳ).

ການໂຈມຕີເຂົ້າໄປເທື່ອນີ້ ບໍ່ທັນໄດ້ເຂົ້າທົ່ງໃຫຫີນ ໄດ້ໂຈມຕີໄປເຖີງທີ່ຮາບສູ່ງຫລາຍບ່ອນ ອ້ອມທົ່ງ ໄຫຫີນແລ້ວ ກໍໄດ້ມີການຢຸດຍີງເກີດຂື້ນ ຍ້ອນການເຊັນສັນຍາສະງົບເສິກ ລະຫວ່າງສະຫາຣັຖ ແລະ ວຽດນາມເໜືອ ຢູ່ທີ່ປາຣີ ປະເທສຝຣັ່ງເສສ ໃນວັນທີ່ 27 ເດືອນມັງກອນ (January) 1973. ຫລັງ ຈາກສັນຍາແລ້ວ ບ.ກ. ກອງພົລ 2 ໄດ້ຮັບຄຳສັ່ງ ໃຫ້ໄປຮັກສາທີ່ໝັ້ນຢູ່ສະລາພູຄູນ ທາງຄົບຖນົນເລຂ ທີ່ 13 ໄປຫາວຽງຈັນທນ໌, ຫລວງພຣະບາງ ແລະ ຖນົນເລຂທີ່ 7 ໄປຫາພູໜອງຜີ, ທົ່ງໄຫຫີນ ແລະວຽດ ນາມເໜືອ. ສ່ວນທີ່ເຫລືອ ນື່ງກຣົມຂອງກອງພົລ 2 ໄດ້ຮັບພາຣະກິດຮັກສາການ ແຖວບ້ານນາ (LS15), ພູຜາໄຊ່ຍ, ປ່າດົງ (LS05), ຄັງໄຂ (LS204), ສອງກຣົມຮັກສາບວມຫລົງ (LS32) ແລະ ນື່ງກຣົມ ຮັກສາເມືອງໝອກ (LS46). ແຜນການແມ່ນປ້ອງກັນພື້ນທີ່ຂອງຝ່າຍມິດ ບໍ່ໃຫ້ສັດຕຣູແຊກຊືມເຂົ້າໄປ ໄດ້. ເຖີງຈະຮັກສາເທົ່າໃດກໍບໍ່ມີປະໂຍດ ເພາະວ່າພາຍຫລັງສະຫາຣັຖແລະວຽດນາມເໜືອ ໄດ້ເຊັນສັນຍາສະງົບເສິກແລ້ວ ກອງທັພແຫ່ງຊາຕລາວ ກໍຂາດຜູ້ຊ່ວຍເຫລືອຕໍ່ໄປ.



*<u>ຮູບທີ່ 124</u>. ບ້ານຊອນ ໄກ້ LS 272 ໃນປີ 1973*

ເມື່ອສຖານະການໄດ້ປ່ຽນແປງໄປແບບບໍ່ປອດໄພຍ໌, ທະຫາຣແກວ ແລະລາວຄອມມຸຍນິສຕ໌ ກໍສ່ວຍໂອກາສ ລ່ວງລະເມີດສັນຍາ ໄດ້ໂຈມຕີຝ່າຍວຽງຈັນທນ໌ຫລາຍຈຸດ ແລະຫລາຍພື້ນທີ່ໄດ້ຖືກໂຈມຕີຄື: ສູນກາງກອງພົນ 2 ທີ່ສະລາພູຄູນ, ເມືອງໝອກ ແລະ ແນວໜ້າ ອ້ອມແອ້ມລ່ອງແຈ້ງ ຫລາຍບ່ອນ. ເມື່ອສູນກາງກອງພົນ 2 ຖືກສັດຕຣູຍຶດໄດ້ ສຖານະການໄດ້ເຣັດໃຫ້ທ່ານນາຍພົລວ່າງປາວ ຈຳເປັນຕ້ອງ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄດ້ເຂົ້າເຝົ້າສະເດັຈເຈົ້າສູວັນນາ ທີ່ໂຮງຂອງສະເດັຈ ທີ່ນະຄອນວຽງຈັນທນ໌. ພໍສເດັຈຫລຽວເຫັນໜ້າ ທ່ານນາຍພິນວ່າງປາວ ເຂົ້າໄປ ສະເດັຈກໍຮ້ອງຂຶ້ນທັນທີວ່າ *"ວ່າງປາວ! ເຈົ້າຍັງມັກສົງຄາມ ແທ້ບໍ?"* ທ່ານນາຍພິນວ່າງປາວ ພຽງແຕ່ຕອບວ່າ *"ຂໍສົ່ງໝວກແລະຊັ້ນນາຍທະຫາຣ ນີ້ຄືນໃຫ້ທ່ານ ແລະ ຂໍລາອອກ!"* ເມື່ອເວົ້າດັ່ງນີ້ ກໍປົດໝວກ, ແກ້ກາດາວເທິງບ່າ ແລ້ວ ເອົາວາງໃສ່ເທິງໂຕະ ຕໍ່ໜ້າສະເດັຈ ແລ້ວ ກໍຍ່າງກັບໄປຂຶ້ນຣົຖ ໄປຫາເຄື່ອງບິນຢູ່ເດີນຍົນຕ໌ວັດໄຕ ເພື່ອກັບລ່ອງແຈ້ງ.

ແມ່ນໃນວັນທີ່ 9 ເດືອນມີນາ (March) ປີ 1975. ມີຜູ້ເລົ່າສູ່ຟັງວ່າ: ສະເດັຈເຈົ້າສູວັນນາພູມາ, ໄດ້ສົ່ງຄົນໄລ່ຕາມໄປຮອ້ງ ທ່ານນາຍພິນ ວ່າງປາວ ໃຫ້ກັບໄປພົບ ແຕ່ບໍ່ທັນ ຣົຖໄດ້ອອກໄປກ່ອນ. ໃນ ວັນທີ່ 12 ເດືອນມີນາ (March) ປີ 1975 ທ່ານນາຍພິນວ່າງປາວ ໄດ້ ຂຶ້ນເຄື່ອງບິນໄປຫລວງພະບາງ ເພື່ອເຂົ້າເຝົ້າເຈົ້າຊີວິດ ສີສຫວ່າງວັທະນາ ຢູ່ວັງຂອງພະອົງ ເພື່ອຂໍຄວາມຄິດເຫັນ ຍ້ອນເປັນຫ່ວງບ້ານເມືອງ ແລະ ປະຊາຊົນ. ເມື່ອນາຍພິນວ່າງປາວ ເຂົ້າໄປເຖິງ ຈຶ່ງໄດ້ທູນພຣະອົງວ່າ: *"ຂ້າພະບາດ ມາຂໍເຂົ້າເຝົ້າພຣະອົງຄັ້ງນີ້ ເພື່ອຮັບສັ່ງວ່າ ສະຖານະການປັ່ນປ່ວນເຊັ່ນນີ້ ຄວນຈະປະຕິບັດແນວໃດ?"* ເຈົ້າສີສຫວ່າງວັທນາ ທຣົງ ສັ່ງວ່າ:




*<u>ຮູບທີ່ 125</u> .ພຣະເຈົ້າ ສຣີສຫວ່າງວັທນາໄປຢ້ຽມຢາມ ຝ່າຍລາວຄອມມຸຍນິສຕ໌ທີ່ເມືອງວຽງໄຊຍປີ 1973*

*"ພະອົງຄ໌ເຮົາ ບໍ່ຕ້ອງການຫຍັງ ຂໍໃຫ້ມີບ້ານຫລັງນີ້ຢູ່ ແລະມີນາ ຜືນນີ້ ທຳມາຫາກິນ ກໍພໍແລ້ວ!"* ເມື່ອນາຍພິນວ່າງປາວ ແລະຂ້າພະເຈົ້າ ທີ່ເປັນຜູ້ຕິດຕາມໄປນຳ ໄດ້ຍິນດັ່ງນີ້ ຂ້າພະເຈົ້າກໍໄດ້ຕິບຫລັງທ່ານນາຍພິນ ໃຫ້ເຊົາຖາມ ບໍ່ຢາກໃຫ້ເວົ້າຫຍັງຕື່ມອີກ ພຽງແຕ່ກາບລາ ແລ້ວກໍກັບລ່ອງແຈ້ງ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຖ້າມາສັງເກດຄັກໆເບິ່ງແລ້ວ ຈຶ່ງເຂົ້າໃຈວ່າ ຂ້າຣາຊການທຸກຊັ້ນ, ຕຳຣວຈ, ທະຫາຣ ແລະ ປະຊາຊົນລາວ ແມ້ແຕ່ເຈົ້າຊີວິດລາວເອງ ກໍຍັງບໍ່ເຂົ້າໃຈ ບໍ່ຮູ້ລັທທິຂອງຄອມມຸຍນິສຕ໌ ດີພໍ ວ່າມັນຮ້າຍແຮງຂນາດໃດ. “ຕາມຂ່າວເລົ່າລືຕໍ່ມາ ໃນປີ 1973 ຝ່າຍລາວຄອມມຸຍນິສຕ໌ ໄດ້ເຊີນເຈົ້າຊີວິດລາວ ແລະ ຜູ້ນຳຝ່າຍວຽງຈັນທນ໌ ຫລາຍຄົນໄປຢ້ຽມຢາມເມືອງວຽງໄຊ໌ຍ, ສູນກາງຂອງລາວຄອມມຸຍນິສຕ໌ ໄດ້ໃຫ້ກຽດຕອ້ນຮັບຢ່າງສະຫງ່າຣາສີ ຈົນເຮັດໃຫ້ເຈົ້າຊີວິດ ສີສະຫວ່າງວັທນາ ກ້າອອກປາກ ວ່າ: “ລາວ ຄ.ມ.ນ. ນັບຖືພະອິງສ໌ ຫລາຍກວ່າຝ່າຍວຽງຈັນທນ໌.”

ບໍ່ເທົ່ານັ້ນ ຜູ້ນຳຝ່າຍວຽງຈັນທນ໌ຫລາຍຄົນ ກໍ່ເຊື່ອຄວາມຫລອກລວງຂອງ ລາວ ຄ.ມ.ນ. ແບບດຽວກັນຢ່າງບໍ່ໜ້າເຊື່ອ ບໍ່ຍອມຮັບວ່າລັທທິ ຄ.ມ.ນ. ແມ່ນປາບລັທທິສັກດີນາ, ປາບຜູ້ນຳ, ປາບນາຍທຶນ, ປາບສາສນາ ແລະ ປາບພັຄຕ່າງໆ. ສຳຫລັບ ຄ.ມ.ນ. ແລ້ວ ມີແຕ່ສູນກາງພັຄເທົ່ານັ້ນ ທີ່ມີສິດເດັດຂາດ. ເມື່ອທຸກຄົນໄດ້ຊີມຣົດຊາດຂອງມັນແລ້ວ ຈຶ່ງມາຮູ້ເມື່ອຄືງ ແຕ່ມັນກໍສາຍໄປແລ້ວ ຈະແກ້ກໍບໍ່ທັນ. ພວກນັກສຶກສາ, ພວກຂ້າຣາຊການ ພາກັນເດີນຂະບວນ ປະທ້ວງ ຂັບໄລ່ຜູ້ນຳ, ພໍ່ແມ່ຂອງຕົນ ໃຫ້ໜີ ອອກໄປເປັນອົພະຍົບ. ຕອນທ້າຍ ພວກທີ່ມີສາຍຕາສັ້ນນີ້ຫລາຍຄົນ ກໍໄດ້ແລ່ນຕາມກົ້ນ ຫາຜູ້ນຳເກົ່າ ແລະພໍ່ແມ່ຂອງຕົນ ໄປຢູ່ໃນຕ່າງປະເທສ. ນາຍພົນບູນປອນ ມາກເທພາຣັກ ເປັນແມ່ທັພຂອງກອງທັພ ແຫ່ງຊາຕລາວ ຝ່າຍວຽງຈັນທນ໌ ຍັງຖືກຄອມມຸຍນິສຫລອກແລ້ວ ໄດ້ເອົາລູກນ້ອງໄປສົມມະນາຢູ່ຄ້າຍຈີໄນໂມ້ ຖືກສັດຕຣູກວດເອົາໄປຂັງຢູ່ສູນດັດສ້າງ ທັງໝົດ 46 ພັນຄົນ. ນາຍພົນບູນປອນເອງ ພ້ອມ ດ້ວຍຣາຊວົງສ໌ທັງໝົດ ກໍຖືກຫລອກໄປຂ້າຖິ້ມ ຢູ່ສູນດັດສ້າງ ເມືອງວຽງໄຊຍ໌ ແຂວງຫົວພັນຄືກັນ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



***<u>ຮູບ #126</u>.*** *ທະຫານວຽດນາມເໜືອ ທະຫລົ່ມກຣົມບັນຊາການກອງພົນທີ່ ໔ ຢູ່ສາລາພູຄູນ ໃນເດືອນມີນາ 1975.*

ກະຣຸນາ ອ່ານບັນທຶກ ການທໍຣະມານ ພວກຜູ້ນຳຝ່າຍວຽງຈັນທນ໌ ຢູ່ຄຸກ ທີ່ວຽງໄຊ ແຂວງຫົວພັນ ວ່າໂຫດຮ້າຍຂນາດໃດ? ທ່ານຜູ້ມັກອ່ານ ຄວນຈອງປຶ້ມທີ່ມີຊື່ວ່າ: “ໂຄ່ນໃຫ້ເຖິງກົກ ຫລິກໃຫ້ເຖິງຮາກ (ຈາກຣາຊບັນລັງ ລົງມາຫາສັງຄົມນິຍົມ”) ຜູ້ຂຽນ ແມ່ນທ່ານ ພ.ອ. ຄຳພັນ ທັມມະຂັນຕິ ມີຄອບຄົວພີ່ນ້ອງໄກ້ຊິດພັລຍາ ແລະລູກສາວ ລູກເຂີຍ ທີ່ຍັງແຈກປຶ້ມດັ່ງກ່າວໃຫ້ຄົນອ່ານທົ່ວໂລກ (ລູກສາວທ່ານ ພ.ອ. ຄຳພັນ ຊື່ນາງຈັນ ວັນນະຣາດ ຕິດຕໍ່ໄດ້ທາງໂຮງສາຍຢູ່ 7321 SE. 20 Ave. Portland, OR 97202-6211. ທ່ານ ພ.ອ. ຄຳພັນໄດ້ຖືກປ່ອຍອອກມາຈາກຄຸກວຽງໄຊຍ໌ ມາເຖິງສະຫະຣັຖ ໃນປີ 1990. ທ່ານໄດ້ເສັຍຊີວິດ ຕອນອາຍຸໄດ້ 74 ປີ ຢູ່ເມືອງປອກແລນ ອໍຣີກັນ ໃນ ວັນທີ່ 26 ເດືອນ ສິງຫາ (August) ປີ 2004. *(ຂໍຂອບໃຈນຳ ທ່ານ ຄຣິສຕອບເຟີ ແກຼມເມີ ທີ່ສົ່ງຂ່າວນີ້ມາໃຫ້ຮູ້ ).*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາດທີ່ 8.

# ອິທພົນອອກຈາກພາດ 2 ແລະ ຣາຊອານາຈັກລາວ

ສັນຍາ ທີ່ປາຣີ ໃນວັນທີ່ 27 ເດືອນມັງກອນ (January) ປີ 1973, ເພື່ອຢຸດຕິ ສົງຄາມວຽດນາມ ມີເຈົ້າໜ້າທີ່ສະຫະຣັຖຄື: ທ່ານເຮນຣີຄິສຊິງເກີຣ໌ (Henry Kissinger). ທ່ານວິນລຽມຣໍເຈີຣ໌ (William Roger) ໃນນາມຝ່າຍສະຫະຣັຖອາເມຣິກາ ແລະ ມີທ່ານເລດຶກໂຖ (Le Duc Tho). ນາງງຽນຖິບິນ (Nguyen Thi Binh), ທ່ານຕຣານວັນລານ (Tran Van Lanh) ແລະນາງງຽນດຸຍຕຣິນ (Nguyen Dui Trinh) ເຊັນໃນນາມຝ່າຍວຽດນາມເໜືອ.



*<u>ຮູບທີ່ 127</u>. ແມ່ນຄນະກັມມະການຂອງວຽດນາມເໜືອທີ່ໄປເຈຣະຈາສັນຍາປາຣີປະເທສຝຣັ່ງເສສ ໃນ ວັນທີ່ 27 ເດືອນມັງກອນ 1973 ຈາກຊ້າຍ ນາງງຽນຖິບິນ; ນາງງຽນດຸຍຕຣິນ ແລະ ນາຍຕຣານ ວານລານ.*

ສັນຍາດັ່ງກ່າວໄດ້ເຮັດໃຫ້ສະຫາຣັຖ ຈຳເປັນຕ້ອງສູນເສັຍທຸກຢ່າງ ບໍ່ວ່າດ້ານການເມືອງ, ດ້ານການທະຫາຣ ເປັນການປຣາໄຊ້ຍ ຄັ້ງຍິ່ງໃຫ່ຍທີ່ສຸດ ຢ່າງບໍ່ເຄີຍມີມາໃນປວັດສາຕ ຂອງສະຫາຣັຖ ແລະ ຣາຊອານາຈັກລາວ. ຖ້າປຽບທຽບໃສຈຳນວນປະຊາຊົນຂອງວຽດນາມເໜືອ ແລະຂອງສະຫະຣັຖ ວຽດ ນາມເໜືອມີພຽງ 15 ລ້ານຄົນ ວຽດນາມທັງໝົດ ລວມທັງສອງວຽດນາມ ມີບໍ່ເຖິງ 35 ລ້ັນຄົນ ໃນເວລານັ້ນ. ວຽດນາມເໜືອ ເປັນປະເທສທີ່ຍາກຈົນທີ່ສຸດໃນໂລກ ແຕ່ສະຫະຣັຖ ມີພົລະເມືອງບໍ່ຕ່ຳກວ່າ 300 ລ້ານ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຄືນ. ບໍ່ເທົ່ານັ້ນ ຍັງເປັນປະເທສທີ່ຮັ່ງມີທີ່ສຸດໃນໂລກ ເປັນມະຫາອຳນາຕຂອງໂລກອີກ. ສະຫະຣັຖຕ້ອງຖອຍອອກຈາກວຽດນາມ ຢ່າງຜູ້ປຣາໄຊ໌ຍ ໜີກໍໜີບໍ່ທັນ ຕ້ອງຖິ້ມທຸກຢ່າງ, ແຕ່ວຽດນາມ ເໜືອ ນັ້ນບຸກໂຈມຕີພັນທະມິດຂອງສະຫາຣັຖ ຄື ຂເມນ, ວຽດນາມໃຕ້ ແລະ ລາວ ຢ່າງມີແບບ ມີແຜນດີທີ່ສຸດ ເປັນຂັ້ນ ເປັນຕອນ ຢ່າງບໍ່ຢ້ານ ບໍ່ຈຽມສົງຄາມກັບສະຫະຣັຖ ແລະບໍ່ຈຽມສັນຍາ ທີ່ໄດ້ເຊັນກັນໄວ້ໃນປີ 1954, 1962 ແລະ 1973.

ສົງຄາມວຽດນາມຈຶ່ງເປັນສົງຄາມທີ່ໜ້າຄິດ, ເປັນບົດຮຽນດີທີ່ສຸດໃຫ້ແກ່ຊາວລາວ, ຊາວຂເມນ ແລະຊາວວຽດນາມ ທັງໝົດ. ເບິ່ງທ່າທີຂອງ ທ່ານເຮນຣີ ກີສຊິງເກີຣ໌ ທີ່ໄດ້ໄປຢັ້ງມຢາມລາວ ແລະວຽດນາມໃຕ້ ໃນວັນທີ່ 9 ເດືອນ ກູມພາ (February) 1973 ແມ່ນໄປສັ່ງໃຫ້ລາວຝ່າຍຂວາ ຍອມຈຳນົນຕໍ່ຄອມມຸຍນິສ ເພາະວ່າສະຫະຣັຖ ຕ້ອງຖອນອອກຈາກລາວ, ຂເມນ ແລະວຽດນາມໃຕ້ ທີ່ໄດ້ຕໍ່ສູ້ຮ່ວມກັບສະຫະຣັຖ ເພາະເຊື່ອວ່າແມ່ນປະເທສມະຫາອຳນາຕ ແລະ ມີຫລັກການ. ແຕ່ສະຫະຣັຖ ຈຳເປັນຕ້ອງຖອນອອກໄປຈາກອິນດູຈີນ ຢ່າງບໍ່ມີທາງເລືອກ ເພາະສະຫະພາບຊວຽດໄດ້ເຂົ້າຮ່ວມ ໜູນຫລັງວຽດນາມເໜືອຢ່າງແຂງແຮງ.

ເມື່ອເຫັນສະພາບປ່ຽນແປງເຊັ່ນນີ້ ທ່ານນາຍພົລຕຣີວ່າງປາວ ຈຶ່ງໄດ້ເປີດປະຊູມກັບບັນດາ ນາຍທະຫານຊັ້ນຜູ້ໃຫ່ຍຫລາຍທ່ານໃນ ພາຄ 2. ຜົລຂອງກອງປະຊູມ ມີສີ່ຂໍ້ດັ່ງຕໍ່ໄປນີ້ຄື:

- **ກ-** ຕຽມເຂົ້າປ່າເພື່ອທຳການຕໍ່ສູ້ຕໍ່ໄປ ເພາະບໍ່ຕ້ອງການເປັນສະເລີຍເສິກສັດຕຣູ ຈະເອົາຝ່າຍວຽງຈັນທ໌ນໄປຂ້າຖິ້ມຄືສັຕ ໂດຽບໍ່ມີມະນຸສສະທັມ ເພາະເປັນຝ່າຍເສັຍປຽບ ແຕ່ເຫັນວ່າແຜນນີ້ເປັນໄປບໍ່ໄດ້ແລະບໍ່ເກີດຜົລ ເພາະແກວແລະແນວລາວ ຄ.ມ.ນ. ຕ້ອງໂຮມກັນ ລົບລ້າງຄົນເຜົ່າລາວສູງ "ມົ້ງ"ແລ້ວ ຕໍ່ໄປແມ່ນແກວລົບລ້າງຄົນລາວຝ່າຍວຽງຈັນທນ໌ ແລະລາວແດງພ້ອມກັນ. ແກວຕ້ອງການເອົາເມືອງລາວ ເປັນຫົວເມືອງຂຶ້ນ ຂອງ ວຽດນາມ ຄ.ມ.ນ. ແນ່ນອນວ່າແຜນນີ້ຈະບໍ່ປອດພັຍ.

- **ຂ-** ຍຶດເອົາແຂວງໄຊ໌ຍະບູຣີ ເປັນທີ່ຕັ້ງ ຖ້າສັດຕຣູ ບໍ່ບຸກໂຈມຕີ ກໍຈະພຍາຍາມສ້າງສາ ພັທະນາຕໍ່ໄປ ຫາກສັດຕຣູບຸກໂຈມຕີ ກໍຕ້ອງຕໍ່ສູ້ ເພາະໄຊຍ໌ະບູຣີເປັນເຂຕ ທີ່ມີຊາຍແດນຕິດກັບປະເທສໄທຍ໌ ການໄປມາລະຫວ່າງສອງປະເທສ ກໍຈະສດວກ ເພາະປະເທສໄທຍ໌ ບໍ່ເປັນຄອມມຸຍນິສຕ໌, ໄດ້ຕໍ່ສູ້ຮ່ວມກັນຍາມສົງຄາມວຽດນາມ ແຕ່ແຜນນີ້ກໍບໍ່ປອດພັຍຄືກັນ ເປັນໄປບໍ່ໄດ້ ເພາະປະຊາຊົນແຖບໄຊຍະບຸຣີ ເປັນໃຈກັບຄອມມຸຍນິສຕ໌ ບໍ່ຕ່ຳກວ່າ 70 ເປີເຊັນ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- **ຄ-** ອອກໄປຂໍເພິ່ງພາອາໄສຢູ່ໃນປະເທສໄທຍ໌ ເມື່ອມີໂອກາສຈຶ່ງກັບຄືນປະເທສລາວ ແຕ່ແນ່ນອນວ່າໄທ໌ຍຈະບໍ່ມີທີ່ດິນ ແລະບ່ອນເພິ່ງພາອາໄສຍ ຍາວນານໃຫ້ແກ່ອົພະຍົບ ທີ່ໄປຈາກລາວ, ແຜນນີ້ກໍອາດຈະເປັນໄດ້ຍາກທີ່ສຸດ ເພາະມີການເມືອງຫລາຍ ຢ່າງທີ່ຈະເກີດຂຶ້ນ ແລະຈະແກ້ໄຂໄດ້ຍາກ.

- **ຈ-** ຂໍຄວາມເຫັນໃຈຈາກສະຫະຣັຖ ວ່າການຕໍ່ສູ້ຄັ້ງນີ້ ແມ່ນສ່ວນໜຶ່ງໃນການເມືອງຂອງ ສະຫະຣັຖ ເພື່ອຢັບຢັ້ງການຂຍາຍຕົວຂອງລັທທິຄອມມຸຍນິສຕ໌ ໄປສູ່ພາຄພື້ນເອເຊັຍຕາວັນອອກສ່ຽງໃຕ້ ແລະທົ່ວໂລກເສຣີ. ບາງທີ ສະຫະຣັຖອາດຈະເຫັນໃຈພວກເຮົາກໍໄດ້ ແລະ ຄວນຕິດຕໍ່ສະຖານທູຕສະຫະຣັຖ ເບິ່ງກ່ອນ.

ດັ່ງນີ້ ໃນວັນທີ່ 10 ເດືອນພຶສະພາ (May) ປີ 1975, ທ່ານນາຍພົນ ວ່າງປາວ ໄດ້ເຊີນທ່ານເອກ ອັຄະຣາຊທູຕສະຫະຣັຖ ໄປປະຊູມເພື່ອອອກຄວາມຄິດເຫັນ. ຕອນນັ້ນເອກອັຄະຣາຊທູຕສະຫະຣັຖຢູ່ເມືອງລາວແມ່ນ ທ່ານຊາກວ້າຍເຮົາ (US Ambassador Charles S. Whitehouse) ແລະທີ່ປຶກສາຂອງສະຫະຣັຖ ຢູ່ນໍາທ່ານນາຍພົນວ່າງປາວ ແມ່ນທ່ານເຢຣີ ດາແນວ (US Military Advisor Jerry Daniel). ຫລັງຈາກທ່ານເອກອັຄະຣາຊທູຕສະຫາຣັຖ ໄດ້ໄປຮອດ ທີ່ປະຊູມແລ້ວ ທ່ານນາຍພົລ ວ່າງປາວ ໄດ້ອະທິບາຍວ່າ ສະຖານະການປ່ຽນແປງແບບນີ້ ແມ່ນອນວ່າ ພີ່ນ້ອງທຸກຄົນໃນພາຄ 2 ທີ່ໄດ້ຮ່ວມຕໍ່ສູ້ຄຽງບ່າຄຽງໄຫລ່ກັບສະຫະຣັຖ ໃນຫລາຍປີຜ່ານມາ ຕ້ອງໄດ້ຮັບຜົລຮ້າຍ ຈາກຝ່າຍຄອມມຸຍນິສຕ໌ທີ່ເປັນຝ່າຍໄດ້ປຽບ. ທ່ານເອກອັຄະຣາຊທູຕສະຫະຣັຖ ໄດ້ຖາມທ່ານນາຍພົນ ວ່າງປາວ ຄືນວ່າ: *"ພວກນາຍທະຫານ ທີ່ຈະໄດ້ຮັບອັນຕະລາຍ ມີຈັກຄົນ?"* ທ່ານນາຍພົລ ວ່າງປາວ ໄດ້ງຽບ ແລະ ຄິດໄດ້ດົນເຕີບ ກໍໄດ້ຕອບວ່າ: *"ມີປະມານ 3,500 ຄົນ."* ທ່ານເອກຄະຣາຊທູຕ ກໍໄດ້ຕອບຕົກລົງ OK ໂອເຄ ທັນທີວ່າ *"ຂ້ອຍຈະຊອກຍົນຕ໌ ມາຮັບເອົາໄປ ປະເທສໄທ໌ຍ ຕໍ່ໄປພວກເຮົາຈຶ່ງມາລົມກັນອີກ. "*

ຂ້າພະເຈົ້າຜູ້ບັນທຶກ ໄດ້ຖືກທ່ານນາຍພົລ ວ່າງປາວ ສັ່ງໃຫ້ໄປອຸດອນ, ປະເທສໄທຍ໌ ໃນວັນທີ່ 10 ເດືອນພຶສະພາ (May) ປີ 1975 ເພື່ອໄປນໍາຍົນຕ໌ເຮລີໂຄບເຕີຂອງທະຫານສະຫະຣັຖ ໄປຂົນເອົາຈໍານວນນາຍທະຫານ ທີ່ໄດ້ຕົກລົງກັບທູຕສະຫະຣັຖ ພ້ອມກັນນັ້ນໄດ້ສັ່ງທະຫານໃຫ້ຕຽມໄຕ້ໄຟໃສ່ເດີນຍົນຕ໌ ເພາະຍົນຕ໌ທະຫານສະຫະຣັຖຈະມາໄດ້ໃນຍາມກາງຄືນເທົ່ານັ້ນ. ເມື່ອຜູ້ບັນທຶກໄດ້ໄປເຖິງ ອຸດອນ ເຈົ້າໜ້າທີ່ຂອງສະຫະຣັຖ ໄດ້ຕົກລົງເອົາຍົນຕ໌ C130, C46, C47 ໄປຂົນແທນ ຜູ້ບັນທຶກຈຶ່ງໄດ້ຄ້າງຢູ່ອຸດອນ ບໍ່ໄດ້ກັບ ແລະ ບໍ່ໄດ້ເຫັນລ່ອງແຈ້ງອີກເລີຍ ຕັ້ງແຕ່ນັ້ນມາ. ຂ້າພະເຈົ້າ ໄດ້ໄປລໍຖ້າ ພວກທີ່ໄດ້ຂົນໄປຈາກລ່ອງແຈ້ງ, ກາໍກັບ ນໍາພາໄປໃສ່ ທີ່ພັກເຊົາ ຕາມແຕ່ລະຫລັງຄາເຮືອນໃນສູນນໍ້າພອງ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສູນນີ້ແມ່ນ ສະຫະຣັຖໄດ້ສ້າງ ເປັນສູນຝຶກທະຫານໄທ໌ຍ ເພື່ອນຳໄປຊ່ວຍຕໍ່ສູ້ສົງຄາມ ຢູ່ໃນພຣະຣາຊອານາຈັກລາວ ໃນການຕໍ່ຕ້ານການລຸກຮານຂອງຄອມມຸຍນິສຕ໌. ສູນຝຶກນ້ຳພອງ ມີຫລາຍຫລັງຄາເຮືອນ ມີເຮືອນຄົວກິນໃຫ້ຊາວອົພະຍົບ ທີ່ມາພັກເຊົາຢ່າງດີ. ບໍ່ທັນຮອດເດືອນ ທຸກຫລັງຄາ ກໍເຕັມໄປດ້ວຍອົພະຍົບ. ເມື່ອເຈົ້ານາຍໄດ້ອົພະຍົບໜີໝົດ ກໍພາໃຫ້ມີປະຊາຊົນຄື: ພໍ່ແມ່, ພີ່ນ້ອງ, ລູກນ້ອງ ແລະ ລູກຫລານເປັນຈຳນວນຫລວງຫລາຍ ໄດ້ໜີຕາມໄປດ້ວຍຣົຖ, ຍ່າງຜ່ານປ່າດົງພູເຂົາ ໄປເຕົ້າໂຮມຢູ່ຕາມຊາຍແດນຣາຊອານາຈັກໄທ໌ຍຄື: ໜອງຄາຍ, ທ່າບໍ່, ຈັງຫວັດນ່ານ, ເລີຍ, ພະເຢົາ, ຫລາຍບ່ອນ ທາງພາຄເໜືອ ແລະ ພາຄໃຕ້. ຈຳນວນອົພະຍົບໄດ້ເພີ່ມຂຶ້ນຈົນບໍ່ມີທີ່ໄປອາໄສຍ, ສ້າງຄວາມບໍ່ປອດໄພ໌ຍໃຫ້ຣາຊອານາຈັກໄທຍ໌ ຈຶ່ງໄດ້ສັ່ງປິດຊາຍແດນ. ຕໍ່ນັ້ນມາ ສະຫະຣັຖ ແລະຣັຖບາລໄທຍ໌ ຈຶ່ງໄດ້ຈັດໃຫ້ມີສູນອົພະຍົບຫລາຍບ່ອນຂຶ້ນ ພ້ອມທັງໄດ້ບີບບັງຄັບໃຫ້ຜູ້ນຳລາວຫລາຍຄົນ ຕ້ອງໄດ້ອອກໄປຈາກປະເທສໄທ໌ຍ ໄປສູ່ປະເທສທີ່ສາມ ໃນຕົ້ນເດືອນ ມິຖຸນາ (June) ປີ 1975.

ໃນຕົ້ນປີ 1976, ສະຫະຣັຖ ກໍໄດ້ຕອ້ນເອົາຊາວອົພະຍົບທີ່ມາຈາກລາວຫລາຍຊົນຊາຕ ຊົນເຜົ່າ ທີ່ຢູ່ໜອງໄຄ, ສູນທ່າບໍ່, ສູນນ້ຳພອງໄປໂຮມກັນຢູ່ສູນວິໄນ ທີ່ໄດ້ສ້າງຂຶ້ນໃໝ່. ເມື່ອຫລາຍເຜົ່າມາໂຮມກັນ, ການຈັດຕັ້ງບໍ່ດີ ນອກນັ້ນໄດ້ມີການແຊກແຊງ ຈາກຜູ້ບໍ່ຫວັງດີອີກ ຈຶ່ງເກີດມີບັນຫາຫລາຍຢ່າງຂຶ້ນ ເຈົ້າໜ້າທີ່ໄທ໌ຍຈຶ່ງໄດ້ ສົ່ງເຜົ່າລາວລຸ່ມໄປຢູ່ນາໂພ. ຢູ່ພາກໃຕ້ ແລະ ພາຄເໜືອຂອງຣາຊອານາຈັກໄທຍ໌ ກໍ່ໄດ້ເປີດຫລາຍສູນ ໃຫ້ຊາວອົພຍົບທີ່ມາຈາກລາວ, ຂເມນ ແລະ ວຽດນາມໃຕ້ ໄດ້ອາໄສຍຢູ່ຊົ່ວຄາວ.

ໃນເດືອນກູມພາ (February) ປີ 1976, ສະຫະຣັຖໄດ້ພະຍາຍາມຕ້ອນເອົາອົພະຍົບທີ່ໄປຈາກລາວຄື: ພວກທີ່ມີການສຶກສາ, ພວກທີ່ໄດ້ເປັນພະນັກງານຂອງຢູເສສ (USAID), ນາຍພາສາຂອງສະຫະຣັຖ ໄປຢູ່ສະຫະຣັຖອາເມຣິກາ. ຕໍ່ຈາກນັ້ນ ກໍແມ່ນຊາວຄຣິສສະຕຽນໃນສະຫະຣັຖ ຍິນດີຕອ້ນເອົາຊາວຄຣິສຕຽນທີ່ມາຈາກລາວ ແລ້ວຕໍ່ໄປແມ່ນຕ້ອນເອົາຜູ້ທີ່ໄດ້ເປັນທະຫານແລະຄອບຄົວ, ຕໍ່ຈາກນັ້ນແມ່ນ ຄອບຄົວຂອງຍາດຕິພີ່ນ້ອງຂອງທະຫານ ແລະ ຂ້າຣາຊການ ທີ່ໄດ້ໄປສະຫະຣັຖກ່ອນ ເລີ່ມແຕ່ ປີ 1976 ຈົນເຖິງປີ 2006 ກໍຍັງຮັບຕ້ອນຢູ່.

ຂໍພະເຈົ້າໂຜດພະພອນແດ່ສະຫະຣັຖ ແລະ ຫລາຍປະເທສ ທີມີຄວາມຮັກ ມີຄວາມເມຕຕາ ຊາວອົພະຍົບທີ່ມາຈາກລາວ, ໃນເວລາເສັຍປະເທສ, ບໍ່ມີທີ່ເພິ່ງພາອາໄສ໌ຍ, ຕົກໃຈ, ເສັຍໃຈ, ບໍ່ລຶ້ງເຄີຍ ສິ່ງທີ່ໄດ້ພົບໄດ້ເຫັນ, ໄດ້ເປັນກຳພ້າປະເທສ, ພັດພາກຈາກຄອບຄົວ, ຈາກພີ່ນ້ອງທີ່ແສນຮັກ ແສນຄິດເຖິງຍ້ອນການປ່ຽນແປງ ຂອງຊີວິດ.

**ທ່ານ ເຢຣີ ດານີວ (Jerry Daniels)**


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແມ່ນຜູ້ຕາງໜ້າຫອ້ງການສາຍລັບ (CIA) ຂອງສະຫະຣັຖ ທີ່ໄດ້ສົ່ງມາຊ່ວຍພາຄ 2 ຕໍ່ສູ້ຄອມມູນິສຕ໌. ທ່ານໄດ້ປະຈຳໜ້າທີ່ຢູ່ນຳທ່ານນາຍພົນ ວ່າງປາວ ເລີ່ມຕັ້ງແຕ່ 1968 ຈົນເຖິງ 1975 ຊື່ປອມ ຍາມສົງຄາມແມ່ນ "ໝູປ່າ" (Hog). ໃນປີ 1971 ຫາ 1972 ທ່ານເຢຣີ ໄດ້ເປັນຜູ້ເບິ່ງແຍງ ໃຫ້ການຊ່ວຍເຫລືອຝ່າຍທະຫາຣທຸກຢ່າງຢູ່ໃນ ພາຄ 2. ໃນປີ 1973 ເຖິງເດືອນພຶດສພາ 1975 ແມ່ນເບິ່ງແຍງດ້ານການພັທນາເສຖາກິດ ຫລັງຈາກສົງຄາມ, ດ້ານສັງຄົມ, ດ້ານປຸກຝັ່ງ ແລະລ້ຽງສັຕ,ໄດ້ຊື້ສັຕລ້ຽງມາຈາກຝັ່ງໄທ໌ຍມາແຈກຢາຍໃຫ້ປະຊາຊົນລ້ຽງ. ໄດ້ສ້າງໂຄງການພັທນາຫລາຍບ່ອນໃນພາຄ 2 ຄື: ນ້ຳງິ້ວ, ນ້ຳຜາ, ພັກແຄ້, ນ້ຳໂມ້, ທົ່ງມັ້ງງ ແລະເມືອງເດຊາ. ນອກຈາກນີ້ ຍັງໄດ້ວາງໂຄງການຫລາຍຢ່າງຄື: ປູກໄມ້, ປູກຕົ້ນຢາໄອ ແລະ ໝາກໄມ້ຕ່າງໆ.

ສົງຄາມໄດ້ຄຸກຄາມ ພາຄ2 ຕ້ອງໄດ້ອົພະຍົບແຕກພ່າຍໄປຢູ່ປະເທສໄທ໌ຍ. ໃນປີ 1975 -1982 ທ່ານເຢຣີ ໄດ້ຕິດຕາມເບິ່ງແຍງໃຫ້ການຊ່ວຍເຫລືອດ້ານການຢູ່ກິນ ແກ່ຊາວອົພະຍົບ ພາຄ 2 ຢູ່ສູນນ້ຳພອງ, ສູນວິໄນ. ໄດ້ເບິ່ງແຍງ ຊ່ວຍເຫລືອໃຫ້ຊາວອົພະຍົບພາຄ 2 ໄດ້ມີໂອກາສໄປຕັ້ງຖິ່ນຖານຊີວິດໃໝ່ຢູ່ໃນສະຫະຣັຖ. ໃນ ວັນທີ່ 28 ເດືອນເມສາ (April) ປີ 1982. ທ່ານເຢຣີ ດານີວ ໄດ້ເສັຍຊີວິດຢູ່ທີ່ບ້ານພັກຂອງທ່ານ ທີ່ບາງກອກ ປະເທສໄທ໌ຍ. ທາງການໄດ້ນຳສົບມາທຳພິທີ ຢູ່ສະຫະຣັຖ ແລະ ໄດ້ປະກາສວ່າທ່ານເຢຣີ ໄດ້ເສັຍຊີວິດ ແລະສົບໄດ້ຝັງໄວ້ທີ່ ຣັຖມົງຕານາ ຢ່າງເປັນທາງການໃນປີ 1982.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



ຮູບທີ່ 128 ນີ້ແມ່ນເດີນບິນ ພູກູ້ມ LS 50 ຕັ້ງຢູ່ຊາຍແດນ ແຂວງ ຊຽງຂວາງ ແລະ ແຂວງ ຫົວພັນ ພູກູ້ມ ໄດ້ຕົກໃຫ້ວຽດນາມ ເໜືອໃນປີ 1969 ເປັນຄ້າຍແນວຫລັງຂອງ ຄ້າຍເຂດຍ່ອຍນາຄັງLS 36 ກໍາກັບເຂດ ແດນແຂວງຫົວພັນ.

ຄຸນງາມຄວາມດີ ການເສັຍສລະ ຂອງ ທ່ານເຢຣີ ດານີວ ໄດ້ເຮັດໃຫ້ປະຊາຊົນໃນເຂດທະຫານພາຄ 2 ແລະ ຜູ້ທີ່ເປັນເພື່ອນຂອງທ່ານ ທີ່ທ່ານໄດ້ຊ່ວຍເຫລືອນັ້ນ ຍັງຈົດຈໍາຕລອດມາ. *(ຂໍໃຫ້ດວງວິນຍານຂອງ ທ່ານ ຈົ່ງໄປສູ່ທີ່ສຸຂ ໃນສວັນຊັ້ນຟ້າ ດ້ວຍ ເທີ້ນ).*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 129.* *ນີ້ແມ່ນຮູບທ່ານ ນາຍພິນ ວ່າງປາວ (ຜູ້ຢູ່ທາງກາງ ຫລຽວໄປທາງຫລັງ), ທ່ານວ່າງເຢີ (ຜູ້ຢູ່ຂ້າງຂວາ ໃສ່ໂມງຢູ່ແຂນຊ້າຍ), ພ້ອມທັງນັກຊ່ວຍຊານໄທ ແລະ ອາເມຣິກັນ (ຜູ້ຍົກທໍ່ນໍ້າ)*



*ຮູບທີ່ 130. ແມ່ນທ່ານ ນາຍພິນ ວ່າງປາວ, ທ່ານວ່າງເຢີ, ທານເຢຣິດາແນວ ນຳພາດ້ວຍທ່ານ ຊຸວິຊາ ເພື່ອຢ້ຽມຢາມ ການປູກພືສ ຕ່າງໆ ໃນ ຣາຊອານາຈັກໄທ໌ຍ ໃນປີ 1973 ທີ່ຊຽງໃໝ່.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 131</u>. ນັກຊ່ຽວຊານດ້ານບໍແຫ່ມາຈາກຣາຊອານາຈັກໄທ໌ຍ, ທ່ານ ນາຍພິນ ວ່າງປາວ, ທ່ານ ດຣ. ຊູຈິດ ຮີຣານປຣຸກ ມາຈາກຣາຊອານາຈັກໄທ໌ຍດ, ທ່ານ ພ.ອ. ຕູ້ພື້ ຄົນເຜົ່າລາວສູງ "ມົ້ງ" ຜູ້ທຳອິດໄດ້ຮຽນຈົບ ປະຣິຍາໂທດ້ານການເມືອງ ຈາກສະຫະຣັດ ແລະ ຕໍ່ໄປແມ່ນ ທ່ານ ພ.ທ. ທ້າວນາ ຫົວໜ້າກໍ່ສ້າງຝ່າຍທະຫາຣ ພາຄ 2 (ຮູບຖ່າຍໃນປີ 1975).*



*<u>ຮູບທີ່ 132</u>. ທ່ານ ຊຸວິຊາ ຮີຣານປຣຸກ ນັກຊ່ຽວຊານດ້ານຄົ້ນຄ້ວ ບໍ່ຕ່າງໄດ້ມາຊ່ວຍທ່ານວ່າງເຢີ ແລະທ່ານນາຍພິນ ວ່າງປາວ ພັທນາພາຄສອງ ໃນຣາຊອານາຈັກລາວ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 133</u>. ທ່ານເຢຣີດານິວ, ທ່ານ ເຢີ ວ່າງ ແລະ ທ່ານ ມົວເກົ້າ 1973*

**ທ່ານ ແລຣີ ວຸດສອນ (Larry D. Woodson)**

ແມ່ນຜູ້ອາສາສະມັກຜູ້ໜຶ່ງທີ່ໄດ້ເດີນທາງໄປຊ່ວຍ ຣາຊອານາຈັກລາວ (ທ່ານຢູ່ຣັດກັນຊັດ ). ທ່ານແລຣີ ຂຽນວ່າ: "ຂ້າພະເຈົ້າໄປເຖິງເມືອງລາວໃນເດືອນສິງຫາ (August) 1964 ໄດ້ຮັບໜ້າທີ່ ເປັນຜູ້ອາສາສມັກສອນໜັງສື ໃນນາມຊາວຕາງດ້າວ ອາສາສມັກ ໄປສມັກສອນຢູ່ໂຮງຮຽນແຂວງຫລວງພຣະບາງ ໜ້າທີ່ ແມ່ນຊ່ວຍທ່ານຄຣູ ເຈົ້າຈັນທະວັດດີ ໃນການເບິ່ງແຍງເຄື່ອງໃຊ້ຂອງໂຮງຮຽນ,ເບິ່ງການຊອ້ມແປງໂຮງຮຽນ, ຊ່ວຍເບິ່ງດ້ານການປູກຝັ່ງ, ແລະລາຍການລະດູຣອ້ນ ແມ່ນເບິ່ງດ້ານກິລາຕ່າງໆ ເພາະຂ້າພະເຈົ້າຫລິ້ນກິລາ ແຕນນິສ (Tennis) ແລະ ສອນພາສາອັງກິດ.

ໃນປີ 1966 ໂຄງການອາສາສມັກຕ່າງປະເທສ ໄດ້ເຊີນຂ້າພະເຈົ້າໃຫ້ເປັນຜູ້ຊ່ວຍໂຄງການໃນການສອນຕາມໂຮງຮຽນຕ່າງໆ ຢູ່ຫລາຍແຂວງໃນປະເທສລາວ. ນອກຈາກນີ້ ຂ້າພະເຈົ້າຍັງໄດ້ສອນພາສາອັງກິດຕາມຄໍາຮອ້ງຂອງຄຣູຝຣັ່ງ ທີ່ໂຮງຮຽນລີສເຊ (Lycee), ໂຮງຮຽນນາຍຊ່າງເຢຣະມັນ ທີ່ວຽງຈັນທນ໌ ກໍານົດເຖິງປີ 1969 ແລ້ວຕໍ່ທຸກໆສອງປີ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1969 ໄດ້ເລື່ອນຊັ້ນເປັນຜູ້ນຳໃນໂຄງການອາສາສມັກມີໜ້າທີ່ເບິ່ງແຍງມະຫາວິທະຍາໄລສີສຫວ່າງວົງຄ໌ ທີ່ດົງໂດກ ຢູ່ນອກເມືອງວຽງຈັນທນ໌ ໜ້າທີ່ແມ່ນຊອກຄຣູມາສອນພາສາອັງກິດ ແລະພາສາອື່ນໆ.



_ຮູບທີ່ 134_. ໂຮງຮຽນຖືກສັດ ຕຣູເຜົ່າຢູ່ພາຄສອງ ທ່ານ ແລຣີ ວຸດສອນຈຶ່ງເອົາຍົນສອບເປີ ຂົນໄມ້ໄປສ້ອມແປງ.




_ຮູບທີ່ 135_. ກາຣຂົນໄມ້ທີ່ຍົນຕ໌ ສິ່ງ ມາໃຫ້ ປະຊາຊົນສອ້ມ ແປງ ໂຮງຮຽນ ທີ່ຖືກຝ່າຍ ຄ.ມ.ນ. ຈູດ ເຜົ່າ. ແມ່ນ "ທ່ານ ແລຣີ ວຸດ ສອນ ເປັນຜູ້ນຳໄປຊ່ວຍເຫລືອ ປະຊາຊົນ ໃນລ່ອງແຈ້ງ ທາງອາກາສທີ່ເຫັນນີ້ແມ່ນຍົນຕ໌ HT 34 ຂອງສະຫະຣັຖ ສົ່ງໄປ ຊ່ວຍ ພາຄ 2.

ໃນປີ 1971 ໄດ້ຮັບໜ້າທີ່ກັບຢູເສດ ໃຫ້ເປັນຜູ້ແນະນຳປຶກສາການສຶກສາແກ່ຊາວອົພະຍົບ ມີໜ້າທີ່ຢູ່ໃນກະຊວງສຶກສາແຫ່ງພຣະຣາຊອານາຈັກລາວ ຂັ້ນປະຖົມການສຶກສາທົ່ວໄປ. ຂ້າພະເຈົ້າໄດ້ທອ່ງທ່ຽວໄປຫລາຍບ່ອນທີ່ມີອົພະຍົບແຕ່ເໜືອຕລອດໃຕ້ ເພື່ອເບິ່ງແຍງຫລາຍບ້ານ ໃນຄວາມຕ້ອງການດ້ານການສຶກ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສາໂດຍສະເພາະແມ່ນເຄື່ອງໃຊ້, ນາຍຄຣູ, ນັກຮຽນ, ຫອ້ງຮຽນ, ກະດານ,ໂຕະຕັ່ງ ຕໍ່ໆໄປ; ກະເບີ່ງແລ້ວໄດ້ຮັບໃຊ້ເດັກນັກຮຽນບໍ່ຕ່ຳກວ່າ 19,000 ຄົນ ແມ່ນຂາດຄຣູ ຂາດບ່ອນສອນຫລາຍທີ່ສຸດ. ຂ້າພະເຈົ້າໄດ້ຈັດຕັ້ງໃຫ້ມີຫອ້ງສອນປະມານ 4,000 ຫອ້ງຂຶ້ນຕື່ມ.

ປີ 1974 ຂ້າພະເຈົ້າໄດ້ຮັບໜ້າທີ່ຈາກ ເອກອັຄະຣາຊທູຕ ສະຫະຣັຖ ໃຫ້ໄປຊ່ວຍໂຄງການກະສິກັມ ແລະການລ້ຽງສັຕຢູ່ໃນພາຄ 2. ຂ້າພະເຈົ້າໄດ້ເດີນທາງໄປລ່ອງແຈ້ງຫລາຍຄັ້ງ ເພື່ອຊ່ວຍນຳສັຕລ້ຽງໄປໃຫ້ປະຊາຊົນມົ້ງ ແລະລາວໃນພາຄນັ້ນ ຄື: ໝູ, ຄວາຍ ແລະ ງົວ ຕາມຄຳຮອ້ງຂໍ ຂອງ ທ່ານນາຍພົນ ວ່າງປາວ. ທ່ານຢາງຢີ ເປັນຜູ້ຖືກແຕ່ງຕັ້ງ ຮ່ວມງານໃນການຊອກຊື້ສັຕຈຳພວກນີ້ ແລະການນຳສິ່ງໄປຫລາຍຈຸດໃນ ພາຄ 2



*<u>ຮູບທີ່ 136</u>. ສຸດທ້າຍເດັກຫລາຍຄົນກໍໄດ້ກັບໄປເຂົ້າໂຮງຮຽນ ດ້ວຍການຊ່ວຍເຫລືອຈາກສະຫະຣັຖ ຊຶ່ງແມ່ນ ທ່ານ ແລຣີ ວຸສສອນ ເປັນຜູ້ ນຳພາ ແລະ ສິ່ງເຄື່ອງຊອ້ມແປງມາຊ່ວຍເຫລືອ. (ຂອບໃຈ ນຳທ່ານ ແລຣີ ຫລາຍໆ)*

ຂ້າພະເຈົ້າໄດ້ສົ່ງສັຕຈຳພວກນີ້ໄປໄສ ບວມຫລົງ LS32 ທິສເໜືອຂອງທົ່ງໄຫຫີນ ແລະ ສົ່ງສັຕໄປໃຫ້ປະຊາຊົນໃນເຂຕ ລ່ອງແຈ້ງ. ສັຕເຫລົ່ານີ້ ແມ່ນເພື່ອໃຫ້ປະຊາຊົນໄດ້ລ້ຽງ ຫລັງຈາກສົງຄາມ ໃຫ້ມີຢູ່ມີກີນ ເພື່ອລົດການຊ່ວຍເຫລືອລົງ. ຍ້ອນການເມືອງປ່ຽນແປງ ສະພາບໄດ້ຮ້າຍແຮງຂຶ້ນ ຂ້າພະເຈົ້າ ຈຶ່ງໄດ້ອອກຈາກ ລ່ອງແຈ້ງ ມື້ວັນສຸກ ແລະໄດ້ໜີອອກຈາກປະເທສລາວ. ຂ້າພະເຈົ້າເຊື່ອແນ່ວ່າລ່ອງແຈ້ງ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຕ້ອງຖືກຝ່າຍປະເທສລາວຍຶດມື້ວັນພຸທຕໍ່ມາ ແລະອີກສອງສາມວັນ ສຖານທີ່ຂອງຢູເສດ (USAID) ໃນນະຄອນວຽງຈັນທນ໌ ກໍຖືກທຳລາຍຄືກັນໝົດ”.



*<u>ຮູບທີ່ 137</u>. ແມ່ນຄນະອົງການຊ່ວຍເຫລືອໄປຢ້ຽມຢາມຊາວເຜົ່າມົ້ງທີ່ເມືອງພູນ LS37 ໃນປີ 1974, ຈາກຊ້າຍທ່ານ ພທ ວ່າງ ຍີວ, ຄົນມົ້ງພະນັກງານສັຕຕະວະເພດບໍ່ຈື່ຊື່; ທ່ານປະໂຣມ ສູນດາຣາ ຫົວໜ້າສັຕຕະວະເພດ ພາກ 2; ທ່ານລວດ ທ່ານໝໍປົວສັຕ ມາຈາກວຽງຈັນທນ໌, ທ່ານ ກຣາມຣາມ ຣອນເຕີ ນັກຊ່ຽວຊານ ດ້ານສັຕຕະວະເພດ ມາຈາກໂອສເຕຣເລັຍ ແລະ ທ່ານ ເລຣີ ວູດສອນ ນັກອາສາສມັກ ມາຈາກສະຫະຣັຖ.*

ທ່ານແລຣີວູດສອນ Larry D. Woodson ເປັນຊາວອາເມຣິກັນຄົນໜຶ່ງທີ່ ຂ້າພະເຈົ້າຮູ້ດີ, ທ່ານປາກພາສາລາວເກັ່ງ ແລະກໍເປັນຄົນດຸໝັ່ນເຮັດແທ້ທຳຈິງໃນການຊ່ວຍເຫລືອ. ບໍ່ເທົ່ານັ້ນ ສິ່ງທີ່ສຳຄັນແມ່ນກ້າສ່ຽງຊີວິດເປັນຄົນອາສາສມັກໄປຊ່ວຍຄົນລາວ ຍາມບ້ານເມືອງກຳລັງມີສົງຄາມ ແລະກັນດານທີ່ສຸດ ຂໍພະເຈົ້າໂພດພະພອນແດ່ທ່ານ ຜູ້ທີ່ມີຄວາມຮັກ ແລະ ອີດູຕົນຄົນລາວທຸກຊົນຊາຕຊົນເຜົ່າ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 9.

# ບັນຫາສົງຄາມອິນດູຈີນ

## ຄຳຖາມແລະຄຳຕອບ

**1/-**<u>ຜົລສະທ້ອນທີ່ເຮັດໃຫ້ເກີດສົງຄາມໃນອິນດູຈີນ</u>

ແມ່ນມາຈາກຫລາຍກໍຣະນີຄື: ເນື່ອງມາຈາກການເປັນລ່າຫົວເມືອງຂຶ້ນຂອງຝ່າຍຕາວັນຕົກ. ຣາຊອານາຈັກ ອັງກິດໄດ້ຄອບຄອງ ຫລືມີສ່ວນກ່ຽວຂອ້ງນຳຫລາຍປະເທສໃນເອເຊັຍ. ປະເທສ ຝຣັ່ງເສສ ໄດ້ຄອບຄອງອິນດູຈີນທີ່ມີ ປະເທສຂເມນ, ປະເທສລາວ ແລະ ປະເທສວຽດນາມ ເປັນຫົວເມືອງຂຶ້ນ. ຝຣັ່ງ ແລະ ໄທ໌ຍຈຶ່ງໄດ້ເອົາແມ່ນ້ຳຂອງເປັນຊາຍແດນ ເພື່ອຄວາມສະດວກໃນການປົກຄອງ, ຝັ່ງຂວາຂອງແມ່ນ້ຳຂອງ ໃຫ້ຂຶ້ນກັບການປົກຄອງຂອງໄທ໌ຍ, ຝັ່ງຊ້າຍແມ່ນ້ຳຂອງ ໃຫ້ຂຶ້ນຢູ່ພາຍໃຕ້ການປົກຄອງ ຂອງຝຣັ່ງເສສ (ແລະແກວ ຜູ້ຢາກເປັນນາຍຂອງ ສາມປະເທສໃນອິນດູຈີນ). ຫລັງຈາກສົງຄາມໂລກຄັ້ງທີ່ສອງໃນປີ 1946, ຣັຖບາລໄທ໌ຍ ຊຶ່ງຕອນນັ້ນມີ ທ່ານປຣີດີພົນົມຍົງເປັນນາຍົກຣັຖມົນຕຣີ ໄດ້ຍອມສົ່ງດິນລາວ ຢູ່ຝັ່ງຂວາຂອງແມ່ນ້ຳຂອງ (ຄືແຂວງໄຊຍະບຸຣີ ແລະແຂວງຈຳປາສັກ) ຄືນໃຫ້ຝຣັ່ງເສສ ເພື່ອ:

- ກ. ແລກປ່ຽນເອົາຄວາມສນັບສນູນຈາກຝຣັ່ງເສສ ໃຫ້ໄທ໌ຍໄດ້ເຂົ້າເປັນສມາຊິກສຫະປະຊາຊາຕ.
- ຂ. ບໍ່ໃຫ້ມີການຕໍ່ວ່າເອົາຄ່າເສັຍຫາຍສົງຄາມໃດໆທັງສິ້ນນຳຣັຖບາລໄທ໌ຍ ແລະ
- ຄ. ໃຫ້ໄດ້ຮັບການຊ່ວຍເຫລືອຢ່າງມະຫາສານຈາກ ສະຫາຣັຖ.

ສຳຫລັບຝຣັ່ງເສສນັ້ນ ໄດ້ກັບມາຄອບຄອງອິນດູຈີນຕາມເດີມ ແລະໄດ້ບັງຄັບໃຫ້ໄທ໌ຍ ສົ່ງສອງແຂວງທີ່ໄດ້ບັນລະຍາຍຂ້າງບົນນີ້ ຄືນໃຫ້ລາວໃນປີ 1946 ຍ້ອນໃນເວລານັ້ນ ລາວອິສຣະແລະວຽດມິນ ໃຊ້ ເປັນສູນກາງຕໍ່ຕ້ານຝຣັ່ງເສສ.

ໃນສມັຍກ່ອນເປັນຫົວເມືອງຂຶ້ນ ແມ່ນ້ຳຂອງ ໄຫລຜ່ານກາງ ຜືນແຜ່ນດິນລາວ ອັນກວ້າງໃຫ່ຍໄພສານ, ຄົນລາວຈຶ່ງໄດ້ແຕ່ງເພັງໄວ້ວ່າ “ເມືອງລາວ ກວ້າງໃຫ່ຍໄພສານ ນ້ຳຂອງໄຫລຜ່ານກາງ, (ໃຫ້ອ່ານບົດເພັງຢູ່ຕອນສຸດທ້າຍ). ການເປັນຫົວເມືອງຂຶ້ນຂອງຕ່າງປະເທສ ໄດ້ເຮັດໃຫ້ປະຊາຊົນລາວ, ວຽດນາມ ແລະຂເມນ ມີຈິດໃຈຮັກຊາຕ ແລະມີຄວາມຕ້ອງການ ຢາກເປັນນາຍຂອງຕົນເອງຫລາຍຂຶ້ນ. ນອກນັ້ນ ກໍມີປະເທສອື່ນ ມາຊຸກຍູ້ໃຫ້ກຳລັງໃຈໄປ ທາງນັ້ນແດ່ ໂດຽອີງອຽງໃສ່ສິທທິມະນຸດ ແລະ ອິສສຣະພາຍໃນທົ່ວໆໄປ. ດັ່ງນັ້ນ ຈຶ່ງໄດ້ມີປະຊາຊົນຈຳນວນຫລວງຫລາຍ ໄດ້ລຸກຂຶ້ນຕໍ່ສູ້ກັບຝຣັ່ງເສສ ເລີ່ມຕັ້ງແຕ່ເກີດ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສົງຄາມໂລກ ຄັ້ງທີ່ສອງ ຕລອດມາ ເພື່ອຫວັງກູ້ເອົາເອກກະຣາຊຈາກຝຣັ່ງເສສ. ຂບວນຕໍ່ສູ້ດັ່ງກ່າວ ຈຶ່ງໄດ້ໄປສົມທົບກັບຂບວນການຕໍ່ສູ້ກູ້ຊາຕ ທີ່ຢູ່ໃນປະເທສໃກ້ຄຽງຄື ວຽດນາມ ຄ.ມ.ນ. ແລະ ຈີນ ຄ.ມ.ນ. ເພື່ອຮັບເອົາການຊ່ວຍເຫລືອ ດ້ານພາຫານະການທຳສົງຄາມ ແລະກຳລັງຄົນເພື່ອມາຕໍ່ສູ້ຊ່ວຍ. ແຕ່ສຸດທ້າຍ ການຊ່ວຍເຫລືອນັ້ນ ໄດ້ກາຍເປັນໜີ້ສິນ ຫລືຂໍ້ຜູກມັດທີ່ແກ້ໄຂຍາກທີ່ສຸດ, ຈຶ່ງເຮັດໃຫ້ປະເທສຊາຕກັບກາຍເປັນທາສຂອງປະເທສເຈົ້າໜີ້, ດັ່ງຄຳໂບຮານສອນວ່າ "ຍິ່ງທຸກ ຍິ່ງຊ້ຳ."

ການປົກຄອງຂອງຝຣັ່ງ ກໍມີແນວດີ, ມີແນວເສັຍ, ແຕ່ເມື່ອຄິດພິຈາຣະນາເບິ່ງລັກໆ ເປັນຫັຽງຄົນລາວຈຶ່ງບໍ່ພ້ອມພຽງກັນ ຮຽນຮູ້ນຳຝຣັ່ງ ແລ້ວເອົາຄວາມຮູ້ຄວາມສາມາດນັ້ນ ມາໃຊ້ໃນການຕໍ່ລອງກັບຝຣັ່ງ ດ້ວຍສະຕິປັນຍາ ແລະ ສັນຕິວິທີ ຈະບໍ່ເປັນທາງອອກທີ່ດີກວ່າການຕໍ່ສູ້ດ້ວຍອາວຸດບໍ? ທຸກເທື່ອທີ່ມີການປ່ຽນແປງ, ກໍມີແນວດີ ແລະແນວເສັຍ ແຕ່ຄວນຈະຊັ່ງຊາເບິ່ງກ່ອນວ່າ ແນວໃດດີ ແນວເສັຍຫລາຍ ແລ້ວຈຶ່ງຄ່ອຍຕັດສິນໃຈ ລັບເອົາສິ່ງທີ່ມີປະໂຍດ ກ່ອນໝູ່. ການປ່ຽນແປງແຕ່ລະເທື່ອ ກໍຕ້ອງໃຊ້ເວລາ ແລະຄວາມອົດທົນ ຈຶ່ງຮູ້ເຫຕຜົລ, ບໍ່ແມ່ນໃຊ້ຄວາມແຄ້ນ ຫລື ອາລົມ ທີ່ຂາດຄວາມຄິດ ຈຶ່ງບໍ່ຖືກຕົ້ມ ກາຍເປັນເຫຍື່ອ ຂອງຜູ້ບໍ່ຫວັ່ງດີ ຢາກສວຍໂອກາສ.

ການຕໍ່ສູ້ດ້ວຍກຳລັງທະຫາຣ ແລະ ອາວຸທ ດັ່ງກ່າວ ໃນທີ່ສຸດ ກໍຍອມໄປເປັນລູກນ້ອງ ຂອງປະເທສ ທີ່ໄດ້ໃຫ້ການຊ່ວຍເຫລືອ, ທີ່ມີຣະບອບການປົກຄອງ ແບບລາວເຮົາ ຮູ້ເທົ່າບໍ່ເຖິງ ຄື ລາວ ຄ.ມ.ນ. ຈຶ່ງໄດ້ນຳຣະບອບແບບໃໝ່ມາໃຫ້ຊາຕລາວ. ຍິ່ງໄປກວ່ານັ້ນ, ໄດ້ນຳປະເທສໄປເປັນຫົວເມືອງຂຶ້ນແບບໃໝ່ ໃຫ້ປະເທສວຽດນາມ ຄ.ມ.ນ, ຜູ້ມາກົດຂີ່ຂົ່ມເຫັງຊາຕລາວ ເຮັດໃຫ້ປະຊາຊົນລາວ ຍິ່ງເຂົ້າໄປສູ່ຄວາມລ້າຫລັງ ຂາດສິທທິເສຣີພາບ ບໍ່ມີສິດເວົ້າໄດ້ ທີ່ຕ່າງດ້າວມາຄົ້ນເອົາສັບພະຍາກອນ ທຸກຢ່າງຢູ່ໃນລາວ ແລະເໜົາດິນດອນ ຕອ່ນຫຍ້າໄປໝົດ.

ໂຮຈິມິນ ຫົວໜ້າຄອມມຸຍນິສວຽດນາມເໜືອ ໄດ້ກ່າວໃນຕອນນຶ່ງ ກ່ອນ ຕັ້ງພັຄວຽດ ມິນໃນປີ 1929 ວ່າ: "*ເຮົາຍອມເປັນຂ້ອຍຝຣັ່ງເສສ ແຕ່ຕ້ອງຮຽນຕຽມເປັນນາຍລາວ ແລະ ຂເມນ ສຳຫລັບອິນດູຈີນທັງໝົດ.*" ໂຮຈິມິນ ໄດ້ຈົບການສຶກສາ ລັດທິຄອມມຸຍນິສ ມາຈາກປະເທສຝຣັ່ງເສສ, ໄດ້ໄປຮຽນຕໍ່ ທີ່ປະເທສ ຣັຊເຊັຍ ເມື່ອເຖິງຖອງລັທທິຄອມມຸຍນິສ ຈຶ່ງໄດ້ກັບຄືນປະເທສໄທ໌ຍ, ເພື່ອຕຽມການຕໍ່ສູ້ກູ້ຊາຕ ຂັບໄລ່ ຝຣັ່ງເສສ ໃຫ້ອອກຈາກອິນດູຈີນ. ໃນເວລານັ້ນ ໄທ໌ຍກໍຢູ່ໃນທ່າທີຕໍ່ຕ້ານຝຣັ່ງເສສ ໂຮຈິມິນຈຶ່ງມີໂອກາສ ຕັ້ງກອງກູ້ຊາຕ ຢູ່ໃນປະເທສໄທ໌ຍ. ພໍດີໂອກາສກໍເໝາະສົມ, ສົງຄາມໂລກຄັ້ງທີ່ສອງໄດ້ເກີດຂຶ້ນຍ້ອນ ຮິດເລີຣ໌ (Hitler) ປາບຝຣັ່ງເສສ ໃນຢູໂຣບ. ຢູ່ໃນເອເຊັຍ ຍີປຸ່ນກໍໄດ້ລູກຂຶ້ນຕໍ່ສູ້ປິດແອກ ຈາກຟ່າຍຕາວັນຕົກຄືສະຫາຣັຖ ມັນກໍເປັນໂອກາສໃຫ້ໂຮຈິມິນ ໄດ້ອາວຸດຈາກສະຫາຣັຖ ເພື່ອຕຽມຕໍ່ສູ້ຍີປຸ່ນ ຊ່ວຍສະຫາຣັຖ. ຍີປຸ່ນຕ້ອງປຣາໄຊ໌ຍສົງຄາມ ແລ້ວໄດ້ຖິ້ມອາວຸທຫລາຍຢ່າງ ໄວ້ໃຫ້ໂຮຈິມິນ ແລະໄທ໌ຍເພື່ອຕໍ່ສູ້ປ້ອງກັນຊາຕ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ກ່ອນເກີດສົງຄາມໂລກຄັ້ງທີ່ສອງ ຢູ່ປະເທສຣັສເຊັຍ ກໍໄດ້ມີການປ່ຽນແປງດ້ານການປົກຄອງ ຄື ພັຄຄອມມຸຍນິສຕ໌ຣັສເຊັຍ ນຳໂດຍທ່ານເລນິນ ຜູ້ຊຶ່ງໄດ້ທຳການປະຕິວັດຕໍ່ຕ້ານລັທທິສັກດິນາ ຂ້າເຊື້ອເຈົ້າຊີວິດຈີນໝົດ ມີເດັກຍິງຄົນດຽວທີ່ລອດໜີໄປໄດ້ ໝາຍຄວາມວ່າ ສົງຄາມ ຄ.ມ.ນ. ກໍໄດ້ເລີ່ມຕົ້ນໃຫ້ ໂຮຈິ ມິນແລ້ວ. ໃນຕົ້ນ ປີ 1945 ເມື່ອໂຮຈິມິນ ມີອາວຸທຢູ່ໃນມື ກໍເລີ່ມກູ້ຊາຕ ຕໍ່ຕ້ານຝຣັ່ງເສສ ຢ່າງຈິງຈັງ ເພາະໃນເວລານັ້ນ ຝຣັ່ງເສສ ກໍໄດ້ຖືກໂຈມຕີຢ່າງໜັກ ຈາກເຢຣະມັນ ຈົນຕັ້ງຕົວບໍ່ຕິດ.

**2/-**<u>ຫລັງຈາກສົງຄາມໂລກຄັ້ງທີ່ສອງສິ້ນສຸດລົງ ກໍເກີດສົງຄາມຄອມມຸຍນິສ</u>, ພາໃຫ້ໂລກນີ້ແບ່ງເປັນ ສອງຝ່າຍຄື: ຝ່າຍຕາວັນອອກ ແລະ ຝ່າຍຕາວັນຕົກ:

- ກ- ຝ່າຍຕາວັນອອກ ເປັນປະເທສທີ່ນິຍົມລັທທິຄອມມຸຍນິສຕ໌ ສ່ວນຫລາຍນຳພາດ້ວຍ ສະຫະພາບໂຊວຽດຣັສເຊັຍ, ຈີນແດງ ແລະ ຫລາຍປະເທສ ທີ່ຢູ່ໃນນະໂຍບາຍຄອມມຸຍນິສຕ໌;
- ຂ-ຝ່າຍຕາວັນຕົກ ນຳພາດ້ວຍສະຫາຣັຖ ແລະພັນທະມິຕໃນຢູໂຣບ ປົກຄອງດ້ວຍຫລັກການເສຣີພາບ ປະຊາທິປະໄຕ ມີການຮ່ວມມືກັນຢ່າງດີ, ແຕ່ຫລັງຈາກເສັຍດຽນບຽນຟູ ໄດ້ມີການຄັດແຍ້ງກັນຫລາຍຢ່າງ.

ໃນປີ 1949, ຄອມມຸຍນິສຕ໌ຈີນ ໄດ້ໄຊຍ໌ຊນະສົງຄາມກັບຈີນຄນະຊາຕ, ຈີນໄດ້ປ່ຽນການປົກຄອງ ມາໃສ່ຣະບອບ ຄ.ມ.ນ. ເມົາເຈີຕົງ ເປັນຜູ້ນຳ, ໄດ້ຄອງໝົດປະເທສຈີນ ດ້ວຍການຊ່ວຍເຫລືອຈາກຣັຊເຊັຍ. ໃນປີ 1950, ເກີດສົງຄາມເກົາລີ ເຮັດໃຫ້ສະຫາຣັຖ ຕ້ອງສົ່ງກຳລັງ ໄປຊ່ວຍເກົາລີເສຣີ ເພື່ອປ້ອງກັນ ຄ.ມ.ນ. ຈຶ່ງໄດ້ເຮັດໃຫ້ເກົາລີ ແບ່ງເປັນສອງສ່ວນຄື:

-**ເກົາລີເໜືອ** ປົກຄອງດ້ວຍລະບອບ ຄ.ມ.ນ. ທີ່ມີຈີນແດງ ແລະຣັຊເຊັຍ ຢູ່ເບື້ອງຫລັງຢ່າງແຂງແຮງ.
-**ເກົາລີໃຕ້** ປົກຄອງດ້ວຍຣະບອບປະຊາທິປະໄຕ ມີສະຫາຣັຖ ຢູ່ເບື້ອງ ຫລັງຢ່າງແຂງແຮງ.

ໃນປີ 1951, ໂຮຈິມິນ ໄດ້ປະກາສຈັດຕັ້ງ <u>ພັຄຄອມມຸນິສອິນດູຈີນ</u> ໃດ້ສົ່ງກຳລັງໄປຝຶກຊ້ອມຢ່າງມະຫາສານ ຕາມຊາຍແດນຈີນ, ວຽດນາມເໜືອ ແລະລາວ ຈຶ່ງເຮັດໃຫ້ຝຣັ່ງເສສ ແລະສະຫາຣັຖ ມີຄວາມກັງວົນຕໍ່ສພາບການ ທີ່ຄອມມຸຍນິສຕ໌ຈະລາມໄປໃສ່ເອເຊັຍຕາວັນອອກສ່ຽງໃຕ້ ຄື: ປະເທສໄທ໌ຍ, ວຽດນາມ, ລາວ, ຂເມນ ແລະ ຕໍ່ໆໄປ.

ໃນປີ 1951, ພັຄຄອມມຸຍນິສຕ໌ ອິນດູຈີນ ໄດ້ມີການແຊກແຊງ ກິຈການ ພາຍໃນຂອງລາວ ຫລາຍຢ່າງແບບເປີດເຜີຍ ແລະແບບປິດລັບໆ ຄື: ຍົ້ວະເອົາເຈົ້າສຸພານຸວົງ ໄປຮ່ວມ ພັຄຄອມມຸຍນິສຕ໌ ອິນດູຈີນ. ໃນ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ປີ 1953, ທ່ານໄອເຊັຮາວເອີ (Dwight D. Eisenhower) ໄດ້ເຂົ້າຮັບໜ້າເປັນປະທານາທິບໍດີສະຫາຣັຖ ທ່ານໄດ້ເປັນຫວ່ງເຫຕການ ທີ່ເກີດຂຶ້ນຢູ່ໃນເອເຊຍ. ທ່ານໄດ້ກ່າວວ່າ *"ຫາກປະເທສລາວເສັຍກໍ ເທົ່າກັບ ເສັຍພາຄພື້ນເອເຊັຍ ຕາວັນອອກສ່ຽງໃຕ້ ທັງໝົດ."* ທ່ານຈຶ່ງໄດ້ຮ່ວມມືກັບນາຍພົລຊາສເດີໂກລ (Charles de Gaulle) ປະທານາທິບໍດີຝຣັ່ງເສສ ວາງແຜນປ້ອງກັນ ລັທທິຄອມມຸຍນິສຕ໌ ບໍ່ໃຫ້ຂະຍາຍ ຕົວອອກ ຈຶ່ງໄດ້ຕົກລົງສ້າງຖານທັພດຽນບຽນຟູ ໃສ່ເຊັ້ນທາງຜ່ານສຳຄັນ ຈາກປະເທສຈີນ ໄປສູ່ປະເທສ ລາວ ເລີ່ມຕົ້ນໃນປີ 1952 ເພື່ອໃຫ້ປົດຮຽນແກ່ຄອມມຸຍນິສ. ຝຣັ່ງເສສໄດ້ທູ້ມເທກຳລັງ ເພື່ອສ້າງຖານທັບ ດຽນບຽນຟູ, ໄດ້ສົ່ງກຳລັງໄປໃສ່ບໍ່ຕ່ຳກວ່າສາມສິບພັນຄົນ ພ້ອມກັບກຳລັງທອ້ງຖິ່ນ ຫລາຍພັນ ຄົນ ໄປຕັ້ງ ໃສ່ຮ່ອມພູ ຕັດທາງສຳຄັນຈາກປະເທສຈີນ ທີ່ໄດ້ຜ່ານວຽດນາມໄປໃສ່ປະເທສລາວ ເພື່ອ ຫລອກໃຫ້ ຄອມມຸຍນິສຕ໌ ຂຶ້ນພູຕີລົງລຸ່ມ ເພາະຢູ່ເທິງພູ ຍົນຕ໌ຖິ້ມລະເບີດໄດ້ງ່າຍ ແລະ ຄອມມຸຍ ນິສຕ໌ບໍ່ສຳນານ ການບຸກໂຈມຕີ ຈາກເທິງລົງລູ່ມ ຍ້ອນອາວຸທໜັກ ແລະ ຄ.ມ.ນ. ມີແຕ່ ຮຽນບຸກໂຈມ ຕີຈາກລຸ່ມຂຶ້ນເທິງພູ.

ໃນເດືອນທັນວາປີ 1952, ວຽດນາມເໜືອ ເຮັດທຸກວິທີທາງ ຊ່ວຍພັຄລາວອິສສຣະ ຍຶດແຂວງຊຳເໜືອ, ແຂວງຜອງສາລີ ອ້າງວ່າ "ໃຫ້ເປັນທີ່ໝັ້ນ ຂອງ ລາວອິສສຣະ" ແຕ່ທີ່ຈິງ ແມ່ນສົ່ງກຳລັງຂອງວຽດມິນ ໄປ ລອ້ມດຽນບຽນຟູ ເພື່ອຕຽມໂຈມຕີຕັດຫລັງຂອງຝຣັ່ງເສສ ທີ່ຈະສົ່ງໄປໜູນຫລັງ "ແມ່ນແຜນຈີນ ຕີມາຈາກ ທິສເໜືອ, ແກວເໜືອ ຕີມາຈາກທິສໃຕ້ ດຽນບຽນຟູ". ຝຣັ່ງເສສແລະສະຫາຣັຖ ໄດ້ຕົກລົງກັນວ່າ: ໃຫ້ຝຣັ່ງ ເສສ ເປັນຜູ້ສົ່ງກຳລັງທະຫາຣແລະອາວຸທໜັກ ໄປເສີມກຳລັງຂອງທອ້ງຖິ່ນ ທີ່ຕັ້ງຢູ່ດຽນບຽນຟູ ສຳຫລັບ ສະຫາຣັຖ ເປັນຜູ້ຕຽມຊ່ວຍການໂຈມຕີທາງອາກາສ. ຝຣັ່ງຈຶ່ງໄດ້ເລີ່ມສົ່ງກຳລັງໄປ ແຕ່ຕົ້ນເດືອນ ພຶສຈິ ກາ (November) ປີ 1953 ຈົນເຖິງເດືອນມັງກອນ (January) ປີ 1954. ແຕ່ສະຫະຣັຖ ບໍ່ໄດ້ປະຕິ ບັດ ຕາມການຕົກລົງໄວ້, ໄດ້ໄປຕົກລົງກັບໂຫຈິມິນ (ສະຫາຣັຖຖືກຫລອກຈາກ ຄ.ມ.ນ ວ່າ ບໍ່ຄວນຊ່ວຍຝຣັ່ງ ເສສຕໍ່ສູ້ວຽດມິນ ມັນເປັນການຂັດຕໍ່ກົດໝາຍຂອງສະຫາຣັຖ ເປັນການໄປຊ່ວຍຍຶດ ວຽດນາມ ເປັນຫົວ ເມືອງຂຶ້ນຂອງຝຣັ່ງເສສ). ດັ່ງນີ້ ສະຫາຣັຖຈຶ່ງໄດ້ຕົກລົງກັບທ່ານໂຮຈິມິນ ໃຫ້ເປີດການເຈຣະ ຈາຂຶ້ນ ແລະ ໄດ້ຕົກລົງ ນັດໃສ່ເຈນີວາ ປະເທສຊຸຍເຊີແລນ ໃນວັນທີ່ 21 ເດືອນພຶດສະພາ (May) ປີ 1954.

ວຽດມິນ ໄດ້ໂອກາສ ກໍເປີດສາກໂຈມຕີດຽນບຽນຟູຢ່າງວອ່ງໄວ ເຮັດໃຫ້ຕົກກ່ອນວັນກຳນົດການເຈຣະຈາ ດຽນບຽນຟູຈຶ່ງໄດ້ເສັຍໃຫ້ວຽດມິນ ໃນວັນທີ່ 7 ເດືອນພຶດສະພາ (May) ປີ 1954. ການຕັດສິນໃຈການ ເມືອງຂອງສະຫາຣັຖບໍ່ແນ່ນອນ ເພາະຊັ່ງຕົວໂຮຈິມິນ ເບົາໂພດ, ບໍ່ຄິດວ່າໂຮຈິມິນ ແມ່ນຜູ້ໜຶ່ງ ໃນຄນະ ກັມມະການ ພັຄຄອມມຸຍນິສຕ໌ໂລກ. ການປຣາໄຊຍ໌ສົງຄາມດຽນບຽນຟູຄັ້ງນີ້ ໄດ້ເຮັດໃຫ້ຝຣັ່ງເສສ ບໍ່ພໍ ໃຈກັບສະຫາຣັຖ. ກອງປະຊູມເຊັນສັນຍາ ຄ້ຳປະກັນສັນຕິພາບໃນອິນດູຈີນ ທີ່ໄດ້ຕຽມໃສ່ວັນທີ່ 20ເດືອນ ກໍຣະກະດາ (July) ປີ 1954 ນັ້ນ ສະຫາຣັຖຈຶ່ງບໍ່ຍອມເຂົ້າຮ່ວມເຊັນນຳ. ສຖານະການ ໄດ້ເຮັດໃຫ້ ຝຣັ່ງ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເສສ ປິ້ນເຂົ້າຮ່ວມມືກັບຄອມມຸຍນິສຕ໌ ດັ່ງນີ້ໃນສົງຄາມອິນດູຈີນ ຈຶ່ງມີ ຝຣັ່ງເສສ ຫລາຍຄົນ ໄດ້ເປັນສາຍລັບ ແລະ ເປັນຜູ້ຊອກຂ່າວ ການເຄື່ອນໄຫວຂອງສະຫາຣັຖ ໃຫ້ວຽດນາມ ຄ.ມ.ນ. ຮູ້ການ ເຄື່ອນໄຫວຂອງສະຫາຣັຖ.

ເໜືອໄປກ່ວານີ້ ສຖານະການໄດ້ເຮັດໃຫ້ ຫລາຍປະເທສໃນໂລກສັ່ນສະເທືອນຢ້ານກົວ ຄ.ມ.ນ. ຢູ່ໃນເອເຊັຍ, ຢູໂຣບ, ທະວີບອາເມຣິກາ ລາຕິນ ປັ່ນປວນ ແລະ ຫັນໄປເຂົ້າຝ່າຍ ຄ.ມ.ນ. ການເມືອງຂອງສະຫາຣັຖ ແລະ ປະເທສທີ່ຢູ່ອ້ອມແອ້ມສະຫາຣັຖ ໄດ້ປັ່ນປ່ວນ ດັ່ງ: ກຸຍບາ (Cuba), ນີກາຣາກົວ (Nicaragua), ອັກຊັງຕິນາ (Argentina) ແລະ ບັນຫາຫລາຍຢ່າງ ໄດ້ເກີດຂຶ້ນຢູ່ໃນໂຢໂຣບ. ຈຶ່ງພາໃຫ້ປະທານາທິບໍດີສະຫາຣັຖ ທ່ານແຄນເນດີ ຕັດສິນໃຈໄປເຮັດເສິກສົງຄາມຢູ່ນອກປະເທສ “ໃນແຫລມອິນດູຈີນ” ແທນທີ່ຈະປ່ອຍໃຫ້ເກີດຂຶ້ນຢູ່ອ້ອມແອ້ມສະຫາຣັຖ ຫລື ໃນສະຫາຣັຖ ເອງ. ການທຳ ສົງຄາມວຽດນາມ ສະຫາຣັຖບໍ່ຕ້ອງການໄຊ໌ຍຊນະ ແຕ່ຕ້ອງການໄປທົດລອງອາວຸດ ກັບ ຄ.ມ.ນ. ເພື່ອໃຫ້ຮູ້ລົດຊາດ ຂອງການທຳສົງຄາມວ່າ: ມັນຮ້າຍແຮງຂນາດໃດ? ເຮົາຈຶ່ງເຫັນວ່າສົງຄາມໃນເຄຊານ (Khesanh) ທ້າຍປີ 1967 ແລະການສູ້ລົບໃນເມືອງເວ້ (Hue) ວັນທີ່ 27 ເດືອນ ກູມພາ (February) 1968 ເປັນສົງຄາມທີ່ ອາເມຣິກາ ເອີ້ນວ່າ “ໝົດທາງສູ້”.

ການເມືອງໃນສະຫາຣັຖ ຈຶ່ງເລີ່ມປັ່ນປ່ວນຢ່າງຮ້າຍແຮງ. ຍ້ອນການປ່ຽນແປງນີ້ ນາຍພົນ ວ່າງປາວ ແລະສະຫາຣັຖ ຈຶ່ງບໍ່ໄດ້ອານຸຍາດໃຫ້ຍົນຕ໌ຝຣັ່ງ ຫລືຄົນຝຣັ່ງ ໄປຢາມລ່ອງແຈ້ງ ຫລືເຂຕທະຫາຣ ພາຄ 2 ແລະ ສະຫາຣັຖບໍ່ຍອມອານຸຍາດໃຫ້ນັກຂ່າວຝຣັ່ງເສສ ໄປໄກ້ເມືອງເວ້, ວຽດນາມໃຕ້.
ພາຍຫລັງ ຄ.ມ.ນ. ວຽດນາມເໜືອໄດ້ໄຊ໌ຍຊນະຽນບຽນຝູ, ປະເທສວຽດນາມໄດ້ແບ່ງເປັນສອງ ພັຄການເມືອງຄື: ພັຄວຽດນາມເໜືອ ແລະ ພັຄວຽດນາມໃຕ້:

## <u>ວຽດນາມເໜືອ</u>

ພັຄ ຄ.ມ.ນ. ໄດ້ສວຍໂອກາສ ແຊກຊຶມເຂົ້າໄປວຽດນາມໃຕ້ ຢ່າງໜ້າຢ້ານກົວ ໄດ້ເຮັດໃຫ້ສະຫາຣັຖ ຕ້ອງໄດ້ໄປຕິດຕາມເບິ່ງການເຄື່ອນໄຫວ ຢູ່ໃນອິນດູຈີນ ຢ່າງໄກ້ສິດ ຈຶ່ງໄດ້ເຫັນເຫຕການເກີດຂຶ້ນ ຫລາຍຢ່າງ ເຊັ່ນ: ໃນ ວັນທີ່ 9 ສິງຫາ (August) ປີ1960 ກອງແລ ໄດ້ກໍ່ຣັຖປະຫາຣ ຂຶ້ນທີ່ນະຄອນວຽງຈັນທນ໌ເມືອງເອກຂອງພຣະຣາຊອານາຈັກລາວ. ຕາມສັນຍາທີ່ເຈນີວາ ປີ1954 ຫ້າມບໍ່ໃຫ້ ມີການແຊກແຊງຂອງ ຕ່າງດ້າວ ຢູ່ ໃນພຣະຣາຊອານາຈັກລາວ ເຣື່ອງນີ້ ຝຣັ່ງເສສເອງ ກໍໄດ້ຮັບຮອງຄໍ້ປະກັນໃຫ້ລາວວ່າ ຖ້າເມື່ອໃດ ວຽດນາມຄອມມຸຍນິສຕ໌ ລະເມີດສັນຍາ ຝຣັ່ງຈະຕ້ອງກັບໄປຊ່ວຍ ພຣະຣາຊອານາຈັກລາວ ທັນທີ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມື່ອ ກອງແລ ເຮັດຣັຖປະຫາຣຂຶ້ນ ວຽດນາມເໜືອ ກໍໃຊ້ຄວາມສລາດຫລາຍ ໄດ້ໃຫ້ກອງແລ ເລືອກເອົາ ເຈົ້າສູວັນນາພູມາ ທີ່ຕອນນັ້ນທາກໍຖືກສົ່ງໄປເປັນເອກອັຄະຣາຊທູຕລາວ ປະຈຳປະເທສຝຣັ່ງເສສ ບໍ່ໄດ້ ດົນເທົ່າໃດ ໃຫ້ກັບມາເປັນນາຍົກຂອງຄນະຣັຖບາລຣັຖປະຫາຣ, ທ່ານເປັນຜູ້ມີເມັຍຊອດຝຣັ່ງ ຊື່ນາງ ອາ ລີນ ອາລາກ (Aline Allard) ເກີດຢູ່ປະເທສລາວ, ທີ່ຝຣັ່ງເຊື່ອຫລາຍກ່ວາຄົນອື່ນໆ. ສຸວັນນາພູມາໄດ້ ປະກາສ ນະໂຍບາຍ ຄວາມເປັນກາງ ປິດປາກປິດຕາ ຝຣັ່ງເສສ ຈີນບໍ່ກ້າເວົ້າ ຫລື ເຮັດຫຽັງຊ່ວຍລາວ. ເຈົ້າສູວັນນາພູມາ ກັບກອງແລ ຂໍການຊ່ວຍເຫລືອຈາກຈີນແດງ, ວຽດນາມເໜືອ, ຣັຊເຊັຍ ແລະໂລກ ຄອມມຸຍນິສຕ໌, ທີ່ໄດ້ສົ່ງອາວຸທ ຍຸດໂທປະກອນສົງຄາມ ແລະ ກຳລັງທະຫາຣວຽດນາມເໜືອ ເຂົ້າໄປ ຊ່ວຍຣັຖບາລ ຣັຖປະຫາຣ ຢູ່ໃນລາວຢ່າງເປີດເຜີຍເຕັມນະຄອນວຽງຈັນທນ໌. ເລີ່ມແຕ່ກອງແລປະຕິວັດ ແລະ ຖອຍອອກຈາກ ວຽງຈັນທນ໌ໄປທາ ທົ່ງໄຫຫີນ, ເຄື່ອງບິນ “ອີຢູຊິນ” ຂນາດໃຫ່ຍຂອງໂຊວຽດ ໄດ້ບິນ ມາຖິ້ມເຄື່ອງ ແລະລົງສນາມບິນວັດໄຕ, ກາສີ, ເມືອງສູຍ ແລະທົ່ງໄຫຫີນ ຢ່າງບໍ່ຂາດສາຍ ມື້ລະຫລາຍ ຮ້ອຍຖ້ຽວ ຂຶ້ນໆລົງໆ ແຕ່ເຊົ້າຈົນຄ່ຳ.

ເມື່ອເຫັນເຫຕການເຊັ່ນນີ້ ສະຫາຣັຖ ຈຶ່ງຕັດສິນໃຈ ໃຫ້ການຊ່ວຍເຫລືອແກ່ຝ່າຍສະເດັຈເຈົ້າບູນອູ້ມ ນະ ຈຳປາສັກ ແລະທ່ານນາຍພົລພູມີ ໜໍສວັນ ສົງຄາມຈຶ່ງໄດ້ລາມໄປເຖິງສະຫາຣັຖ ຕ້ອງຢັບຢັ້ງ ການຂຍາຍ ຕົວຂອງຄອມມຸຍນິສໄປສູ່ວຽດນາມໃຕ້ ແລະເອເຊັຍຕາວັນອອກສ່ຽງໃຕ້. ປະທານາທິບໍດີ ສະຫາ ຣັຖ ທ່ານ ແຄນເນດີ ໄດ້ຕັດສິນໃຈ ພົວພັນກັບສົງຄາມອິນດູຈີນ ຕັ້ງແຕ່ປີ 1963 ເປັນຕົ້ນມາ ທີ່ ສະຫາຣັຖ ເອີ້ນ ສົງຄາມນີ້ວ່າ “ສົງຄາມ ສິບພັນມື້” (10,000 day-war) ຟັງເບິ່ງແລ້ວ ເປັນສົງຄາມ ທີ່ຍາວນານ ສຸດຂອງ ສະຫາຣັຖ ເພາະວ່າໃນປວັດສາຕ ບໍ່ເຄີຍມີການຕໍ່ສູ້ກັບສັດຕຣູ ທີ່ໄດ້ຍິນແຕ່ສຽງປືນ ບໍ່ເຫັນຕົວ ຄົນ ປ່າດົງ ກໍຕຶບໜາ ເຕັມໄປດ້ວຍສັຕຮ້າຍທຸກຊະນິດ ອາກາສ ກໍແຕກຕ່າງ ບໍ່ຄື ຢູ່ໃນ ສະຫາຣັຖ.

ໃນປີ 1970, ເຈົ້າສີຫານຸ ຕ້ອງໄປຫລີ້ພັຍຢູ່ເມືອງຈີນ ຍ້ອນນາຍພົນລອງໂນນ ໄດ້ປະຕິວັດ ເພາະສະ ຫາ ຣັຖແລະວຽດນາມໃຕ້ ຕ້ອງການຄວາມຊ່ວຍເຫລືອ ຂອງທ່ານນາຍພົນລອງໂນນ. ສີຫານຸ ປະກາສ ຄວາມ ເປັນກາງ ແຕ່ໄດ້ໃຫ້ປະເທສຂເມນເປັນຈຸດທີ່ຜ່ານ ແລະລີ້ຊ່ອນກຳລັງຂອງວຽດນາມເໜືອ ເພື່ອເຂົ້າໄປ ໂຈມຕີວຽດນາມໃຕ້. ສີຫານຸ ແລະເຈົ້າສຸວັນນາພູມາ ມີນະໂຍບາຍແບບດຽວກັນ, ດັ່ງນັ້ນ ເມື່ອນາຍພົນກຸ ປະສິດອາໄພຍ໌ ໂຈມຕີວຽງຈັນທນ໌ ຫລັງຈາກ ຣ.ອ. ກອງແລ ເຮັດຣັຖປະຫາຣ ເຈົ້າສຸວັນນາ ຈຶ່ງໄດ້ບິນໄປ ລີ້ ໄພຍ໌ຢູ່ໃນ ປະເທສຂເມນ.

## ວຽດນາມໃຕ້

ເປັນຝ່າຍເສຣີ ການຖອນອອກຂອງຝຣັ່ງເສສ ກໍໄດ້ເລີ່ມຂຶ້ນຫລັງຈາກປີ 1954 ແຕ່ກໍຍັງມີຝຣັ່ງ ທີ່ໄດ້ລົງ ທຶນທຳການຄ້າຂາຍຫລາຍຢ່າງໃນວຽດນາມໃຕ້ ຕ້ອງໄດ້ຄ່ອຍໆຖອນອອກ ມີຜູ້ນຳວຽດນາມຫລາຍຄົນ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ບໍ່ພໍໃຈ, ຈຶ່ງມີການຕໍ່ວ່າຕໍ່ຂານຫລາຍຢ່າງ ຜົລສຸດທ້າຍ ກໍມີການປະຕິວັດ ແລະຕ້ອງຂໍການຊ່ວຍເຫລືອ ຈາກສະຫາຣັຖ ເພື່ອປ້ອງກັນ ການນຂຍາຍຕົວຂອງ ຄ.ມ.ນ. ໄປສູ່ ວຽດນາມໃຕ້. ສົງຄາມໃນອິນດູຈີນ ຈຶ່ງໄດ້ເກີດ ຂຶ້ນ.

ໃນປີ 1969, ສະຫາພາບໂຊວຽດ ແລະ ຈີນແດງ ໄດ້ມີການຂັດແຍ້ງກັນ ຢູ່ໃນຊາຍແດນຂອງ ປະເທສ ທັງສອງ.

ໃນປີ 1951-1969, ພັຄ ຄ.ມ.ນ. ອິນດູຈີນ ບໍ່ຄອ່ຍອອກໜ້າໃນການຕໍ່ສູ້ຕ່າງໆ ແຕ່ ຫລັງຈາກທ່ານນິກສັນ



*<u>ຮູບທີ່ 138</u>. ທ່ານນິກສັນ ແລະ ທ່ານເມົາເຈີຕົງ ໄດ້ພົບກັນໃນວັນທີ່ 21 ເດືອນກູມພາປີ 1972.ຫລັງຈາກນັ້ນກໍມີການປ່ຽນແປງ ຫລາຍຢ່າງໃນເອເຊັຍໂດຽສະເພາະແມ່ນສົງຄາມໃນອິນດູຈີນໄດ້ໜັກຂຶ້ນຢ່າງບໍ່ໜ້າເຊື່ອ ເລີ່ມແຕ່ປີ 1968 ຣັຊເຊັຍໄດ້ທຸ້ມເທ ອາວຸທ ຫລາຍຢ່າງ ຊ່ວຍວຽດນາມເໜືອ ແຕ່ນັ້ນມາ ການເມືອງ ລະຫວ່າງວຽດນາມ ຄ.ມ.ນ. ແລະ ຈີນແດງ ໄດ້ປ່ຽນແປງໄປ.*

ປະທານາທິບໍດີ ສະຫາຣັຖ (President Nixon) ໄປຢ້ຽມຢາມຈີນ ໃນວັນທີ່ 21 ເດືອນກູມພາ (February) ປີ 1972, ພັຄຄອມມູຍນິສຕ໌ ອິນດູຈີນ ໄດ້ເລີ້ມອອກບົດບາດສຳຄັນຫລາຍຢ່າງ ເຊັ່ນ: ການປ່ຽນຜູ້ນຳພັຄ ລາວ ຄ.ມ.ນ. ໃຫ້ໄກສອນ ພົມວິຫານ ເປັນຫົວໜ້າ, ເຈົ້າສຸພານຸວົງສ໌ ກໍພຽງແຕ່ເປັນ ຜູ້ນຳ ດ້ວຍຊື່ ບໍ່ມີບົດບາດສຳຄັນອັນໃດ ລູກຊາຍ ກໍຖືກ ຄອມມູຍນິສຕ໌ລາວແດງ ຂ້າຖິ້ມ ຢູ່ຊຳເໜືອ ແຂວງ ຫົວພັນ ແລ້ວຫາເຣື່ອງໃສ່ວ່າ "ແມ່ນມົ້ງ ເປັນຜູ້ຂ້າ."



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ເປັນຫຍັງອາເມຣິກາຈຶ່ງຕ້ອງຖອນອອກຈາກສົງຄາມອິນດູຈີນ?

ຄວາມຈິງແລ້ວ ກອງທັບຂອງສະຫາຣັຖ ບໍ່ໄດ້ເສັຍສົງຄາມວຽດນາມ. ທ່ານນິກສັນ ປະທານາທິບໍດີ ສະຫາຣັຖ ໄດ້ຂຽນໄວ້ໃນປຶ້ມຊື່ວ່າ "ເປັນຫຍັງວຽດນາມເໜືອຈຶ່ງໄດ້ໄຊຍຊນະສົງຄາມຢູ່ວຽດນາມໃຕ້ (Why the North won the Vietnam war?") ໃນ ວັກທີ່ 8 ໜ້າ 219 ວ່າ: "ແມ່ນຜົລມາຈາກຄົນອາເມຣິກາເອງ ໄດ້ເຮັດໃຫ້ເສັຍສົງຄາມ. ໂຊວຽດຈີນເປັນຜູ້ເກັບຜົລປະໂຍດເທົ່ານັ້ນ". ອັນນີ້ເປັນຄວາມຈິງແທ້ ເພາະວ່າການເມືອງໃນສະຫາຣັຖ ໄດ້ປ່ຽນແປງຢ່າງບໍ່ໜ້າເຊື່ອ ຄື: ນັກຮຽນ ແລະ ປະຊາຊົນເດີນຂະບວນ ຕໍ່ຕ້ານຣັຖບາລ ໃນປີ 1965 ແລະ1966 ຢ່າງຮູນແຮງ. ໃນປີ 1972 ຈີນຕ້ອງໃຊ້ອາວຸດປາບເຮັດໃຫ້ນັກຮຽນໄດ້ຕາຍໄປຫລາຍຄົນ ຢູ່ຣັຖແທນເນຊີ ແລະໂອໄຮໂອ. ບັນຫາເຣື່ອງ ວໍ໊ເຕີແກສ (Watergate) ເຮັດໃຫ້ທ່ານນິກສັນ ປະທານາທິບໍດີສະຫາຣັຖ ຕ້ອງລາອອກຈາກໜ້າທີ່ທັນທີ ໃນ 1974 ແລ້ວແມ່ນ ທ່ານຝອສ ຜູ້ລອງ ໄດ້ດຳຣົງໜ້າທີ່ແທນ. ໃນເມື່ອສະພາບໄດ້ປ່ຽນແປງແບບນີ້ ສະຫາຣັຖຕ້ອງຫັນມາສົນໃຈ ສຖານນະການບ້ານເມືອງໃນສະຫາຣັຖເອງ ແທນທີ່ຈະໄປສົນໃຈ ບັນຫາໃນວຽດນາມ ທີ່ຢູ່ຫ່າງໄກ ແລະບໍ່ມີປະໂຍດສຳຄັນອັນໃດໃຫ້ແກ່ສະຫາຣັຖ. ອິນດູຈີນ ຈຶ່ງຕ້ອງຕົກໄປໃຫ້ວຽດນາມເໜືອ ຢ່າງງ່າຍ ດາຍ ບໍ່ມີທາງເລືອກ.

ໃນ 1967, ວຽດນາມຄອມມຸຍນິສຕ໌ ເລີ່ມບຸກໂຈມຕີ ທົ່ວພຣະຣາຊອານາຈັກລາວ ແລະ ວຽດນາມໃຕ້. ມີນັກຂ່າວ ຝຣັ່ງເສສ ຄົນນຶ່ງໄດ້ເດີນທາງໄປພົບ ນາຍພົລໂວງຽນຢາບ (Gen. Vo Nguyen Giap) ໄດ້ຖາມວ່າ: *"ທ່ານຄິດແນວໃດ ການຕໍ່ສູ້ກັບສະຫາຣັຖ, ເພາະເຫັນວ່າ ມັນກັນດານແທ້!"* ນາຍພົລໂວງຽນຢາບ ຕອບວ່າ: *"ແນ່ນອນຕ້ອງມີສົງຄາມດຽນບຽນຟູ ອີກຄັ້ງທີ່ ສອງ ຢູ່ໃນວຽດນາມໃຕ້!"* ນັກຂ່າວຝຣັ່ງເສສບໍ່ໄດ້ຖາມຫຍັງຕື່ມ ໄດ້ລາ ແລ້ວໄດ້ເດີນທາງໄປພົບກັບທ່ານນາຍພົນ ແວສມໍແລນ (Gen. West moreland) ຜູ້ບັນຊາການທະຫາຣ ຂອງສະຫາຣັຖ ຢູ່ວຽດນາມໃຕ້. ນັກຂ່າວໄດ້ຖາມທ່ານ ນາຍ ພົນວ່າ: "*ທ່ານນາຍພົລຄິດແນວໃດ ໃນຄວາມເວົ້າຂອງນາຍພົລໂວງຽນຢາບ ວ່າ: "ຕ້ອງມີສົງຄາມ ດຽນ ບຽນຟູ ອີກຄັ້ງທີ່ສອງ ຢູ່ໃນວຽດນາມໃຕ້?"* ນາຍພົລ ແວສມໍແລນ ຕອບວ່າບໍ່ຮູ້ ໃຫ້ໄປຖາມຜູ້ລອງ ຢູ່ທີ່ ເມືອງເວ້. ນັກຂ່າວ ກໍເລີຍລາຈາກໄປ ຄິດຢາກໄປຖາມຜູ້ລອງຂອງສະຫາຣັຖ ທີ່ເມືອງເວ້ ເຕັມທີ ແຕ່ເຈົ້າໜ້າທີ່ຂອງສະຫາຣັຖ ຫ້າມບໍ່ໃຫ້ ນັກຂ່າວຝຣັ່ງເສສ ເຂົ້າໄປໃນເຂຕເມືອງເວ້ ເພາະຄວາມກັນດານ. ເມື່ອ ນັກຂ່າວຝຣັ່ງເສສຈາກໄປແລ້ວ ນາຍພົລ ແວສມໍແລນ ໄດ້ຮຽກປະຊຸມ ກັບນາຍທະຫາຣຄົນສຳຄັນຫລາຍຄົນຂອງສະຫາຣັຖ ປຶກສາຫາລືກັນ ກ່ຽວກັບເຣື່ອງຄວາມເວົ້າຂອງ ນາຍພົລໂວງຽນຢາບ ທີ່ເວົ້າວ່າ ຕ້ອງມີສົງຄາມດຽນບຽນຟູ ຄັ້ງທີ່ສອງ ຢູ່ໃນວຽດນາມໃຕ້.

ມັນຈະເກີດໄດ້ຢ່າງໃດ? ແລະ ຈະເກີດຂຶ້ນ ຢູ່ບ່ອນໃດ? ເມື່ອນາຍພົນສະຫາຣັຖ ໄດ້ສົນທະນາກັນແລ້ວ ໄດ້ພິສູດເບິ່ງເສັ້ນທາງເຄື່ອນໄຫວ ຂອງສັດຕຣູ ທີ່ຈະເຂົ້າໂຈມຕີ ວຽດນາມໃຕ້ ມີດັ່ງນີ້:



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- **ກ**-ເຄື່ອນມາທາງທະເລ ເຫັນວ່າເປັນໄປບໍ່ໄດ້ ເພາະວຽດນາມເໜືອ ຍັງຂາດອຸປະກອນການສູ້ຮົບທາງທະເລແລະຍັງບໍ່ພ້ອມການບຸກທາງທະເລ ກໍສໍ່າກັບວ່າ ແມງເມົ່າ ບິນເຂົ້າກອງໄຟ.
- **ຂ**-ໂຈມຕີເຂົ້າໃນເຂດປອດທະຫານ (Demilitarized zone) ເຫັນວ່າເປັນໄປບໍ່ໄດ້ເໝືອນກັນ ເພາະວ່າໂລກຈະມອງເຫັນວ່າ ວຽດນາມເໜືອລຸກລານວຽດນາມໃຕ້. ວຽດນາມເໜືອຕ້ອງໃຊ້ກໍາລັງອັນມະຫາສານ ພ້ອມດ້ວຍອາວຸທຍຸດໂທປະກອນໜັກຂອງທະຫານ ຈຶ່ງຈະເຂົ້າບຸກໂຈມຕີພັນທະມິດ ຢູ່ແຖວນັ້ນໄດ້ ເພາະຢູ່ໃນເຂດປອດທະຫານນັ້ນ ວຽດນາມເໜືອ ກໍຮູ້ດີວ່າມັນເປັນວົງລອ້ມ ການຍິງປືນໃຫ່ຍຂອງກອງທັບ ເຮືອສະຫາຣັຖ ທີ່ປະຈໍາຢູ່ໃນອ່າວທະເລຈີນ ເປັນການສ່ຽງພັຍ ຫລາຍທີ່ສຸດ ສໍາຫລັບກໍາລັງຂອງວຽດນາມເໜືອ.
- **ຄ**-ມີທາງດຽວທີ່ເປັນໄປໄດ້ຄື: ເຄື່ອນທີ່ເຂົ້າປ່າດົງ ຕາມຊາຍແດນລາວ ແລະ ຂເມນ ເຂົ້າວຽດນາມໃຕ້ເທົ່ານັ້ນ ທີ່ ຄ.ມ.ນ. ວຽດນາມເໜືອ ສາມາດເຮັດໄດ້ ແລະ ຢາກ ລົງມືເຕັມທີ.

ນາຍທະຫານ ສັ້ນສູງຂອງ ສະຫາຣັຖປະຈໍາ ຢູ່ວຽດນາມໃຕ້ ຈຶ່ງໄດ້ຕົກລົງສ້າງຖານທັພຂຶ້ນທີ່ "ເຄຊານ (Khe-Sanh)" ຊາຍແດນລາວ/ວຽດນາມໃຕ້/ວຽດນາມເໜືອ ໄກ້ກັບເຊໂປນ (Sepone, Laos). ສະຫາ ຣັຖ ໄດ້ສ້າງເປັນຖານທັພແໜັ້ນໜາ ແຂງແກ່ນ ມີກໍາລັງສະຫາຣັຖປະມານຫົກພັນຄົນ ແລະທະຫານທອ້ງ ຖິ່ນຊາວມົງຕາຍາ (Montagnard) ຕໍ່ສູ້ຮ່ວມສະຫາຣັຖ, ເປັນພວກຢູ່ດ້ານໜ້າ ແລະ ທະຫານວຽດນາມໃຕ້ ລະຫວ່າງກາງ ໄດ້ວາງເປັນປອ້ມຕໍ່ສູ້ ກວ້າງ ຫລາຍກວ່າແປດໄມ ມີຄ້າຍຕິດໆກັນ ເພື່ອໃຫ້ຖອຍ ໄດ້ງ່າຍ ເຂົ້າມາໃສ່ຈຸດທາງກາງສອງໄມມົນທົນ ສະຫາຣັຖໄດ້ຈັດຮົ້ວໜາມໝາກຈັບ ແລະມີແຜນວາງລະເບີດຕາມຈຸດທີ່ຕ້ອງການ, ມີເຄື່ອງໄຟຟ້າ ສໍາຫລັບຈັບຈຸດຂອງສັດຕຣູ ວ່າເຂົ້າມາຈາກທິສທາງໃດມີນ້ອຍ ຫລືຫລາຍເທົ່າໃດ. ຖານທັບແຫ່ງນີ້ໄດ້ສ້າງສໍາເຣັດ ຕອນທ້າຍປີ 1967.

ຝ່າຍຄອມມຸຍນິສຕ໌ໄດ້ແນມ ແລະ ຊອມເບິ່ງການສ້າງຖານທັພນີ້ ໄດ້ວາງແຜນບຸກໂຈມຕີຖານທັພ ເມື່ອສ້າງສໍາເຣັດໃໝ່ໆ. ນາຍພົນໂວງຽນຢາບ ໄດ້ສົ່ງກໍາລັງຫລາຍກວ່າຫົກສິບພັນຄົນ (ຫລາຍກວ່າ ສະຫາຣັຖ 10 ຕໍ່ 1) ບຸກໂຈມຕີຖານທັພແຄຊານ (Khesanh) ທະຫານຂອງນາຍພົນໂວງຽນຢາບໄດ້ໂຈມຕີກອງທະຫານ ຂອງສະຫາຣັຖ ຢູ່ດ່ານໜ້າ ຫ່າງຈາກກອງບັນຊາການ ກາງ 8 ໄມ ຫຍໍ້ເຂົ້າໄປຫາກອງບັນຊາກາງ ຢູ່ຫ່າງ 4 ໄມ, ກອງທະຫານ ສະຫາຣັຖ ໄດ້ຖອຍເຂົ້າໄປຫອ້ມໂຮມຢູ່ໃນຄ້າຍ ສູນກາງກວ້າງ 2 ໄມມົນທົນ ຄິດຈະລໍໃຫ້ນາຍພົນ ໂວງຽນຢາບ ເຄື່ອນເຂົ້າໄປເຖິງຈຸດຖິ້ມລະເບີດເສັຍກ່ອນ ຈຶ່ງສັ່ງເຄື່ອງບິນເບ 52 (B52) ຖິ້ມລະເບີດໃສ່, ແຕ່ທົນບໍ່ໄຫວຕໍ່ການໂຈມຕີຂອງສັດຕຣູ. ສະຫາຣັຖຈໍາເປັນຕ້ອງໃຊ້ ເບ 52 ຖິ້ມລະເບີດ ແບບປູພົມ (ລໍາລຽນລໍາ ຕິດໆກັນ).



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມື່ອຢຸດຕິການຖິ້ມລະເບີດແລ້ວ ທະຫານສະຫາຣັຖໄດ້ຮູ້ສຽງສັນຍານ ທີ່ໄດ້ວາງໄວ້ນັ້ນ ບອກສະພາບການຂອງສັດຕຣູ ວ່າເປັນແບບໃດ? ຍ້ອນການສູນເສັຍໜັກທີ່ແຄຊານ ນາຍພົນໂວງຽນຢາບຈຶ່ງໄດ້ສັ່ງພັດຄອມມຸຍນິສຕ໌ວຽດນາມໃຕ້ໂຈມຕີເມືອງເວ້ ຕໍ່ເນື່ອງກັນ ໃນຍາມກິນກຸຕປີໃໝ່ ວຽດນາມຈຶ່ງໄດ້ນຳຜົນເສັຍຫາຍຢ່າງນັກໃຫ້ສອງຝ່າຍ.

ໃນເດືອນເມສາ (April) ປີ 1968, ການຕໍ່ສູ້ຍັງດຳເນີນຢູ່ໃນຖານທັພແຄຊານ ດ້ວຍການຍິງປືນໃຫ່ຍຂອງສັດຕຣູ. ສະຫາຣັຖໄດ້ສົ່ງຍົນຕ໌ເຮລີໂຄບເຕີຣ໌ ໄປຂົນເອົາທະຫານຂອງຕົນອອກຈາກແຄຊານ ໝົດແລ້ວໄດ້ປະກາສ ວ່າ: "ຖານທັພແຄຊານ ໄດ້ເສັຍໃຫ້ຄອມມຸຍນິສຕ໌ແລ້ວ." ມີເຮລີໂຄບ ຫລາຍລຳ ຖືກຍິງຕົກເວລາໄປຂົນທະຫານອອກ. ນາຍພົນໂວງຽນຢາບ ໄດ້ຮັບບົດຮຽນຄັ້ງນີ້ຢ່າງເຈັບແສບ. ກຳລັງ 60 ພັນຄົນເຫລືອຕາຍພຽງ 10 ພັນຄົນ ແຕ່ໄດ້ເສັຍອິງຄະ ໃຊ້ການບໍ່ໄດ້ ເປັນຈຳນວນສ່ວນຫລາຍ.

ຫລັງຈາກນັ້ນ ນັກຂ່າວຝຣັ່ງເສສໄດ້ກັບໄປພົບນາຍພົນໂວງຽນຢາບ ອີກໄດ້ຖາມທ່ານວ່າ: "*ເປັນຫັຍງ ທ່ານຈຶ່ງ ບໍ່ຂໍກຳລັງຈີນແດງ ໄປຊ່ວຍຄືຢູ່ດຽນບຽນຟູ? ທ່ານຈຶ່ງເອົາທະຫານວຽດນາມ ໄປຕາຍຫລາຍແທ້?*" ນາຍພົນໂວງຽນຢາບຕອບນັກຂ່າວວ່າ: "*ບໍ່ຢາກຂໍໃຫ້ຈີນໄປຊ່ວຍ ເພາະຈີນໄປຮອດບ່ອນໃດ ຈີນເກີດຢູ່ບ່ອນຫັ້ນ* ." ແລ້ວກໍບໍ່ໄດ້ເວົ້າຫັຍງຕື່ມໃຫ້ນັກຂ່າວອີກ.

ຄອມມຸຍນິສຕ໌ວຽດນາມເໜືອ ເຫັນທ່າເສັຍປຽບໃຫ້ກອງທັພສະຫາຣັຖ ໃນສະໜາມຣົບແຄຊານ ຈຶ່ງໄດ້ຫັນປ່ຽນຍຸທະວິທີໃໝ່ຄື: ຫັນມາໃຊ້ກອງທັພປະຊາຊົນ ໃນວຽດນາມໃຕ້ ດ້ວຍການປ່ຽນເຄື່ອງນຸ່ງຊຸດສີດຳບໍ່ແມ່ນສີຂຽວ ຄົນສ່ວນຫລາຍຈຶ່ງເຫັນຂ່າວອອກວ່າ ນັກຣົບທີ່ຕາຍຢູ່ໃນສະໜາມຣົບເມືອງເວ້ (Hue) ບ້ານ ມີເລ່ (Me Le) ໃນວັນທີ່ 27 ເດືອນ ກູມພາ (February) ປີ 1968 ຍາມກິນກຸດປີໃໝ່ວຽດນາມນັ້ນນຸ່ງເຄື່ອງສີດຳໝົດ. ພວກເຂົາຈຶ່ງໄດ້ກ່າວຫາວ່າ ກອງທັພຂອງສະຫາຣັຖ ໄປຂ້າປະຊາຊົນວຽດນາມ. ທະ ຫານສະຫາຣັຖ ທີ່ໄດ້ໄປສູ້ຣົບໃນວຽດນາມໃຕ້ ຈຶ່ງໄດ້ຊື່ວ່າ ພວກຄາຕະກອນສົງຄາມ ເພາະປະຊາຊົນສະຫາຣັຖ ບໍ່ເຂົ້າໃຈແຜນຍຸທະສາຕແບບໃໝ່ຂອງຄອມມຸຍນິສຕ໌ ແມ່ນນາງແຢນ ຟອນດາ (Jane Fonda) ເປັນຜູ້ຮັບໃຊ້ແຜນຂອງ ຄ.ມ.ນ. ໄປເປົ່າຂ່າວນີ້ ເພື່ອເຮັດໃຫ້ປະຊາຊົນ, ນັກຮຽນ, ພວກຮິບປີຜົມຍາວຂອງສະຫາຣັຖ ເດີນຂບວນປະທ້ວງຣັຖບາລ, ບໍ່ເຫັນດີໃຫ້ດຳເນີນສົງຄາມວຽດນາມຕໍ່ໄປ.

ສະຫາຣັຖ ຈຶ່ງຕ້ອງເສັຍສົງຄາມດ້ານການເມືອງ, ໄດ້ເຮັດໃຫ້ ກອງທັພຂອງສະຫາຣັຖ ທີ່ໄປຕໍ່ສູ້ສົງຄາມວຽດນາມ ກັບບ້ານ ຢ່າງ ອັບອາຍ ຕໍ່ສັງຄົມອາເມຣິກັນ. ພາຣະກິດທຸກຢ່າງ ຕ້ອງໃຊ້ໄຫວພິກເລ່ຫລ່ຽມຊນະຝ່າຍຕົງກັນຂ້າມ. ດ້ວຍເຫຕນີ້ ຝ່າຍພັນທະມິຕ ຍັງຮູ້ເລ່ຫລ່ຽມຂອງ ຄ.ມ.ນ. ບໍ່ດີພໍ ຈຶ່ງເສັຍປຽບໃຫ້ຄອມມຸຍນິສຕ໌ ວຽດນາມເໜືອ ທີ່ໄດ້ໃຊ້ແຜນຂອງນາຍພານ ລ່າຍິງສັຕປ່າ ເຊັ່ນ ລ່າຍິງກວາງ. ການເມືອງ ທັມະດາແລ້ວ ກວາງຕົວຜູ້ ຈະບໍ່ອອກມາບ່ອນແຈ້ງກ່ອນກວາງໂຕແມ່ ແລະ ລູກຂອງມັນຈັກເທື່ອ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມື່ອໃດນັກລ່າສັດ ຫລື ນາຍພານ ທີ່ບໍ່ມີຄວາມສຳນານ ການລ່າ ສັດປ່າ ຕ້ອງຍິງກວາງ ໂຕແມ່ຫລື ລູກ ຂອງມັນ ໂຕຜູ້ ເປັນຜູ້ທີ່ສລາດໄດ້ໂອກາສ ແລ່ນໜີໄປຫາບ່ອນປອດພັຍກ່ອນ ຈຶ່ງພົ້ນຈາກຄວາມຕາຍ. ແລະ ນັກຣົບວຽດ ກໍຄືກວາງໂຕຜູ້. ນັກລົບອາເມຣິກາ ທີ່ໄດ້ໄປທຳສົງຄາມຢູ່ວຽດນາມ ກໍຄືນັກລ່າສັດປ່າ ທີ່ບໍ່ ມີຄວາມສຳນານດີພໍ ຈຶ່ງຍິງແຕ່ກວາງໂຕແມ່ ແລະ ລູກຂອງມັນ.

ຄອມມຸຍນິສມັກໃຊ້ເດັກນ້ອຍ ວາງລະເບີດ, ຜູ້ຍິງ ກໍມີສ່ວນຮ່ວມໃນການຕໍ່ສູ້ສົງຄາມ ຄື ການໃຊ້ເລ່ຫລຽມ ຫລອກຕົ້ມຕ່າງໆ (Psychological Warfare) ຈຶ່ງເອີ້ນວ່າສົງຄາມ "ປະຊາຊົນ ຫລື ກອງທັບປະຊາຊົນ." ນອກຈາກນີ້ ຄອມມຸຍນິສຕ໌ ມັກໃຊ້ປະຊາຊົນເປັນທີ່ກັ້ນບາງ ເພາະ ຄ.ມ.ນ. ຮູ້ວ່າສະຫາຣັຖ ບໍທຳລາຍ ປະຊາຊົນ. ການທີ່ສະຫາຣັຖ ໄປທຳສົງຄາມຢູ່ໃນວຽດນາມ ແມ່ນແຕ່ໄປໃຫ້ການຊ່ວຍເຫລືອ ປົກປ້ອງ ມີແຕ່ທາງເສັຍ ບໍ່ມີທາງໄດ້. ສິ່ງທີ່ໄດ້ ແມ່ນເຮັດໃຫ້ໂລກຄອມມຸຍນິສຕ໌ແຕກອອກຈາກກັນແລະ ປ່ຽນແນວຄິດໃໝ. ໃນປະຈຸບັນ ໂລກຄອມມຸຍນິສສ່ວນຫລາຍໄດ້ປ່ຽນແປງໄປຫລາຍຢ່າງ ເຖິງຈະເຫລືອຢູ່ ກໍເປັນສ່ວນນ້ອຍ ຄ່ອຍໆປ່ຽນໄປເລື້ອຍໆ ເຊັ່ນ: ການປ່ຽນແປງໃນຣັຊເຊັຍ, ໃນຈີນແຜ່ນດິນໃຫ່ຍ. ສົມຄວນໃຫ້ ສະຫາຣັຖ ເຂົ້າໄປຄວບຄຸມສຖານະການຂອງໂລກ ທີ່ກຳລັງຢູ່ໃນການຄຸກຄາມ ຈາກໂລກ ຄ.ມ.ນ. ທີ່ຈະລາມໄປສູ່ປະເທສນ້ອຍໆທົ່ວໂລກ ທີ່ບໍ່ມີຄວາມສາມາດ ປ້ອງກັນຕົນເອງ ຄື: ລາວ, ໄທ໌ຍ, ຂເມນ, ວຽດນາມໃຕ້. ຫາກບໍ່ມີເຈົ້າໂລກ ທີ່ມີໃຈກວ້າງດັ່ງສະຫາຣັຖໄປຊ່ວຍ ໂລກນີ້ ຕ້ອງຂາດຄວາມປອດພັຍ ເພາະປະເທສເຫລົ່ານີ້ ບໍ່ມີຄວາມສາມາດຈະປ້ອງກັນຕົນເອງໄດ້.




*<u>ຮູບທີ່ 139</u>. ທາງຜ່ານ ໂຮຈິມິນ ໄປຫາ ຖານທັບເຄຊານ ໃນວຽດນາມໃຕ້ ທ້າຍປີ 1967. ວຽດນາມເໜືອ ສົ່ງທະຫານຫລາຍກວ່າ 60,000 ຄົນ ໄປຕີເຄຊານ ແຕ່ບໍ່ຊະນະ ເຫລືອ ພຽງ 10,000 ຄົນກັບຄືນມາບ້ານ ບາດເຈັບສາຫັດ ຫລື ເສັຍອົງຄະ.*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com







ຮູບທີ່ 140 (ຊ້າຍ) ແລະ 141 (ຂວາ). ແຜນ ຂອງສະຫະຣັຖ ເພື່ອໃຫ້ບົດຮຽນໃຫ້ວຽດ ຄອມມຸຍນິສ ຢູ່ໃນຖານທັພແຄຊານ ວຽດນາມໃຕ້ ໄດ້ຮັບ ຜົນຢ່າງດີ ແຕ່ກັບກາຍເປັນ ສິ່ງທີ່ນຳຄວາມເສັຍຫາຍ ມາສູ່ແນວຄິດຂອງ ປະຊາຊົນ ສະຫະຣັຖ ອາເມຣິກັນ.



ຮູບທີ່ 142. ຮູບນາງສາວ ຊາວໄທດຳ ກຳລັງສ້າງຖນົນ ເຂົ້າໂຈມຕີ ດຽນບຽນ ຟູ ໃນປີ 1954.

ໃນເວລາທີ່ຈີນແຜນດິນໃຫ່ຍ ກຳລັງມີບັນຫາຊາຍແດນກັບ ສະຫະພາບໂຊວຽດ ກໍເປັນໂອກາສໃຫ້ວຽດ ນາມ ຄ.ມ.ນ. ໄດ້ລັບອຸປະກອນສົງຄາມຈາກປະເທສຣັຊເຊັຍ ທຸກຊະນິດ ເພື່ອທຳສົງຄາມຕໍ່ສູ້ ສະຫາຣັຖ ແລະຫັນໄປເຂົ້າຂ້າງສະນັບສນຸນສະຫາພາບໂຊວຽດ ຈີນເຮັດໃຫ້ທ່ານເມົາເຈີຕຶງ ຕ້ອງອອກປາກ ຂໍໃຫ້ສະ ຫາຣັຖ ພະຍາຍາມຈັ້ງຢູ່ໃນພາຄພື້ນອິນດູຈີນຕໍ່ໄປ ຈຶ່ງມີການພົບປະລະຫວ່າງຜູ້ຕາງໜ້າສະຫາຣັຖ ທ່ານ ປະທານາທິບໍດີ ນິກສັນ ແລະ ທ່ານເມົາເຈີຕຶງ ໃນປີ 1972.

ໃນປີ 1972, ຜູ້ນຳຂັ້ນຕຳແໜ່ງຣັຖະມົນຕຣີຂອງຝ່າຍ "ແນວລາວຮັກຊາຕ" ຫລາຍຄົນ, ໄດ້ບອກຄົນສຳ ຄັນຝ່າຍ ວຽງຈັນຫນ໌ ວ່າ: "*ພວກເຮົາຕົນວິດດິນໝົດທຸກຄົນແລ້ວເດີ! ຕ້ອງຊ່ວຍກັນໄດ໋.*" ກ່ຽວເຣື່ອງ ດັ່ງ ກ່າວນີ້, ພຣະຍາຕູ້ບີ ລີຟຸງ ກໍຮູ້ ແລະ ທ່ານນາຍພົນ ວ່າງປາວ ກໍໄດ້ຊາບຢ່າງດີ, ແຕ່ເພິ່ນທັງສອງ ບໍ່ໄດ້ ເອົາໃຈໃສ່ ເພາະຄຳເວົ້າຂອງຄນະປະເທສລາວ ຫລືລາວຄອມມຸຍນິສຕ໌ ບໍ່ເປັນຕາໜ້າເຊື່ອ ມີແຕ່ ຄວາມ ເວົ້າຫລອກລວງສ່ວນຫລາຍ. ໃນປີ 1974, ທ່ານນາຍພົລ ວ່າງປາວ ໄດ້ຖືກເຊີນໄປຮ່ວມກອງ ປະຊູມຢູ່ ທີ່ພຣະຣາຊວັງຫລວງພຣະບາງ, ໃນຂນະດຽວກັນນັ້ນ, ເຈົ້າສຸພານຸວົງສ໌ ໄດ້ຍື່ນເຈັ້ຍກະດາສ ໃບນ້ອຍໆ ໃສ່ມືຂອງ ນາຍທະຫາຣຜູ້ອາຣັກຂາສ່ວນຕົວຂອງທ່ານນາຍພົນວ່າງປາວ ບອກວ່າ "*ຊ່ວຍເອົາ ເຈັ້ຍນີ້ ໃຫ້ນາຍພົລວ່າງປາວແດ່!*"



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຄວາມເວົ້າຢູ່ໃນເຈັ້ຍນ້ອຍໆນັ້ນ ມີຂໍ້ຄວາມດັ່ງນີ້: *"ຢາກພົບທ່ານນາຍພົລ ເປັນການສ່ວນຕົວ ກ່ຽວກັບບ້ານເມືອງກຳລັງຈະສູນເສັຍ"*, ແຕ່ທ່ານນາຍພົລວ່າງປາວ ໄດ້ເພີດເສີຍ; ບໍ່ໄດ້ເອົາໃຈໃສ່ໃນ ເຣື່ອງດັ່ງກ່າວ ເພາະຕາມທີ່ໄດ້ປະສົບການມານັ້ນ ຝ່າຍປະເທສລາວ ແມ່ນບໍ່ເຮັດຕາມຄຳເວົ້າ ຫລືຄຳສັນຍາ ຕາມເຈັ້ຍສໍທີ່ໄດ້ເຊັນໄວ້ ມີແຕ່ໂຄສນາຫລອກລວງ ແລະລັບໃຊ້ນະໂຍບາຍຂອງ ວຽດນາມເໜືອ ຄ.ມ.ນ. ເທົ່ານັ້ນ.

## ປັຈສິມມະວາຈາ ຂອງສະເດັດເຈົ້າສຸພານຸວົງ

(ກ່ອນສິ້ນພຣະຊົນ, ຂຽນໃນປີ 1993)

ຈາກໜັງສືພິມເຣື່ອງ " ຊ້າງເຈົ້າຊີວິດ ຖືກໄສ້ ("Stalking the Elephant King", by Christopher Kremmer) ຂຽນໂດຍທ່ານຄຣິສໂຕປເຟີ ແກຼມເມີ. ເພິ່ນເປັນນັກຂຽນໜັງສືພິມ, ນັກຊອກຂ່າວ ຊາວອອສເຕຣເລັຍ ທີ່ສົນໃຈສະຖານະການໃນເອເຊັຍອາຄະເນ, ໄດ້ຂຽນຫລາຍປຶ້ມ ກ່ຽວກັບສົງຄາມວຽດນາມ ແລະ ລາວ. ຫລັງຈາກສະຫາຣັຖໄດ້ຖອນອອກຈາກວຽດນາມ, ລາວ ແລະ ກຳພູເຈັຍ ປະປ່ອຍໃຫ້ສາມຊາຕ ປະເຊີນໜ້າກັບຊາຕາກັມໂດຍລຳພັງ ພາຍໃຕ້ ແອກຄອບຄອງ ຂອງຄອມມຸຍນິສຕ໌ ທ່ານໄດ້ສົນໃຈເຫຕການໃນອິນດູຈີນ ໂດຍສະເພາະແມ່ນປະເທສລາວ ທຳໃຫ້ທ່ານພະຍາຍາມຫລາຍຄັ້ງ ຫລາຍທົ່ນ ທີ່ຈະເຂົ້າໄປສັງເກດການ ດ້ວຍຕົນເອງ ແຕ່ກໍບໍ່ສາມາດຜ່ານຜ່າ ກຳແພງໄມ້ໄຜ່ ທີ່ ຄ.ມ.ນ. ລາວແດງປົກງຳດ້ວຍຄວາມລີ້ລັບ ພາຍໃນປະເທສໄດ້. ຈົນກະທັ້ງລະບອບຄອມມຸຍນິສຕ໌ ພັງທະລາຍໃນຢູໂຣປ ພວກກຳອຳນາຈຜເດັຈການຄອມມຸຍນິສຕ໌ລາວແດງ ຈຳເປັນຕ້ອງ ໄຂປະຕູຂໍທານການຊ່ວຍເຫລືອ ຈາກປະເທສເສຣີ ທີ່ນິຍົມໃນນັ້ນປະເທສ ອອສເຕຣເລັຍ ເປັນປະເທສໜຶ່ງ ທີ່ໄດ້ຍື່ນມືເຂົ້າໄປຊ່ວຍເຫລືອ. ພວກກຳອຳນາຈ ຜເດັຈການລາວແດງ ບໍ່ສາມາດຂັດຂວາງ ນັກຂ່າວໜັງສືພິມອອສເຕຣເລັຍຕໍ່ໄປ ທ່ານຄຣິສໂຕປເຟີ ຈຶ່ງໄດ້ຮັບອານຸຍາຕໃຫ້ ທ່ານເດີນທາງເຂົ້າໄປຍັງປະເທສລາວ ໃນທ້າຍປີ 1993.

ຈຸດມຸ່ງໝາຍສຳຄັນທີ່ທ່ານ ຕ້ອງການແມ່ນຊອກຮູ້ ຊາຕາກັມຂອງພຣະບາດສົມເດັຈພຣະເຈົ້າມະຫາຊີວິດລາວແລະ ພຣະບໍຣົມວົງສານຸວົງສ໌ ທີ່ໄດ້ຫາຍສາບສູນໄປຕັ້ງແຕ່ ປີ 1976. ອາສັຍໄຫວພິກຂອງນັກຂ່າວໜັງສືພິມ ຜູ້ມີປະສົບປະການ ທ່ານຈຶ່ງມີໂອກາສເຂົ້າພົບເຈົ້າສຸພານຸວົງສ໌ ທີ່ກຳລັງເຈັບໜັກຢູ່ທີ່ໂຮງປະທັບຄຸ້ມໂພນສະອາດ ແລະໃນໂອກາສນີ້ເອງ ທີ່ເຈົ້າສຸພານຸວົງສ໌ ໄດ້ເປີດເຜີຍເຣື່ອງຣາວ ໂດຍລະອຽດ ກ່ຽວກັບການພົວພັນກັບວຽດນາມ ແລະໄດ້ຂໍຝາກວາຈາ ຄັ້ງສຸດທ້າຍຜ່ານທ່ານໄປຍັງປະຊາຊົນລາວທຸກຄົນ ເຊິ່ງມີເນື້ອໃນໃຈຄວາມດັ່ງນີ້: "ຍ້ອນຂ້າພະເຈົ້າບູຊາຄວາມສວຍງາມຂອງແມ່ຍິງ ຈຶ່ງກາຍເປັນຄົນຫູໜວກຕາບອດໃນຊີວິດ, ມາບັດນີ້ ຂ້າພະເຈົ້າຈຶ່ງຮູ້ວ່າ ເປັນຄວາມຜິດຢ່າງໃຫ່ຍ ຫລວງໃນ ຊີວິດຂອງຂ້າພະເຈົ້າ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂ້າພະເຈົ້າບໍ່ຄິດວ່າພວກວຽດມິນ ຈະມີພຶດຈິກັມໂຫດຮ້າຍເຖິງຂນາດນີ້ຕໍ່ປະເທສຊາຕ ແລະຕໍ່ປະຊາຊົນລາວຂອງພວກຂ້າພະເຈົ້າ.

ໃນຊວ່ງເວລາທີ່ຂ້າພະເຈົ້າໄປຮວ່ມໄມ້ຮ່ວມມືກັບພວກວຽດມິນ ເພື່ອທຳການກູ້ຊາຕນັ້ນ ໄດ້ສັນຍາກັນໄວ້ວ່າເມື່ອໃດສົງຄາມຍຸຕິລົງ ຄົນວຽດນາມຕ້ອງກັບເມືອ ຢູ່ປະເທສວຽດນາມ ຄົນລາວກໍຕ້ອງກັບເມືອຢູ່ປະເທສລາວ ເຖິງວ່າສັນຍາ ມິຕພາບລາວວຽດນາມ ເປັນບ້ານພີ່ເມືອງນ້ອງກັນ ຍັງໃຊ້ໄດ້ຢູ່ກໍຕາມ.

ຂ້າພະເຈົ້າບໍ່ຮູ້ວ່າ ເມື່ອໃດພວກເຂົາຈະເອົາຮ່າງກາຍຂອງຂ້າພະເຈົ້າ ໄປຈູດເຜົາ ແຕ່ພຶດຕິກັມທີ່ພວກເຂົາເຈົ້າກະທຳຕໍ່ປະເທສຊາດ ຂອງພວກຂ້າພະເຈົ້ານັ້ນ ລຶບບໍ່ສູນກັບການ ຢຸດລົມຫາຍໃຈ ແລະ ການເຜົາສົບຂອງຂ້າພະເຈົ້າ. ກ່ອນນີ້ ຂ້າພະເຈົ້າບໍ່ສາມາຖເວົ້າອອກມາ ມີແຕ່ປະປ່ອຍມັນໄວ້ຢູ່ເບື້ອງຫລັງທໍ່ນັ້ນ. ດັ່ງນີ້ຕໍ່ໜ້າສະພາບການ ອັນຮ້າຍແຮງ ຂອງປະເທສຊາຕບ້ານເມືອງລາວນີ້ ຂ້າພະເຈົ້າຂໍຮຽກຮອ້ງມາຍັງພີ່ນ້ອງຮ່ວມຊາຕທັງຍິງ, ຊາຍ, ລູກຫລານທຸກຄົນທຸກຊົນຊາຕຊົນເຜົ່າ ແລະ ຜູ້ຊົງຄຸນະວຸທທິ ທັງຫລາຍທີ່ມີສຸຂພາບເຂັ້ມແຂງ ຈົ່ງມາໂຮມກັນເຂົ້າເປັນອັນດຽວເພື່ອຊຳລະລ້າງໂທສກັມຂອງຂ້າພະເຈົ້າ ທີ່ມີຕໍ່ປະເທສຊາຕ ແລະປະຊາຊົນພົລເມືອງລາວ.

ດຽວນີ້ ຂ້າພະເຈົ້າບໍ່ແມ່ນຜູ້ຮັກຊາຕ ແລະ ຜູ້ຫາຜົນປະໂຍຊນ໌ໃຫ້ແກ່ປະຊາຊົນອີກແລ້ວ ຍ້ອນຖືກເຂົາຕົ້ມ. ເມື່ອພວກລູກຫລານ ໄດ້ຍິນ ໄດ້ຟັງ ຫລືໄດ້ອ່ານ ຄຳຮຽກຮ້ອງນີ້ແລ້ວ ຈົ່ງຮີບຫັນປ່ຽນແນວຄິດຈິຕໃຈໄປສູ່ທິສທາງໃໝ່ເພື່ອປົກປັກຮັກສາປະເທສຊາຕ ແລະຊັພຍ໌ສົມບັຕຂອງຊາຕ ຂອງປະຊາຊົນ ສຳຄັນທີ່ສຸດແມ່ນ ຊີວິດຂອງຄວາມເປັນລາວໄວ້ໃຫ້ໝັ້ນຄົງ.

ພີ່ນ້ອງຮ່ວມຊາຕທີ່ຮັກແພງທັງຫລາຍໂດຽສະເພາະແມ່ນພວກ ອ້າຍ, ເອື້ອຍ, ນ້ອງ ແລະລູກຫລານ ທີ່ຢູ່ຕ່າງປະເທສ ແມ່ນຜູ້ຮັກຊາຕ ແພງເຊື້ອ ຢ່າງແທ້ຈິງ ພວກເຈົ້າເຫັນການໄກ ແລະມີຄວາມຮູ້ຄວາມ ສລາດສ່ອງຊອດ ຄວາມຮັກຊາຕຂອງພວກເຈົ້ານັ້ນມີມາກຫລາຍ ພວກເຈົ້າຢ່າປະໃຫ້ປະເທສຊາຕ ຕາຍ (ເຊື້ອຊາຕດັບສູນ). ສຳຫລັບພີ່ນ້ອງລູກຫລານທີ່ຢູ່ໃນປະເທສ ຕ້ອງຮີບປະຕິຮູບຕົວເອງ ແລ້ວກອດຮັດເຂົ້າ ກັນໃຫ້ແໜ້ນ ກ້າວເດີນໄປສູ່ທາງໃໝ່, ພິເສສສຸດ ແມ່ນຕ້ອງເດີນໄປຕາມແນວຄິດ ຂອງພວກລູກຫລານທີ່ຢູ່ຕ່າງປະເທສ. ຖ້າພວກເຈົ້າ ເຂົ້າໃຈສະພາບການບ້ານເມືອງດີ ແລະ ປະຕິບັດຕາມຄຳຮຽກຮອ້ງດັ່ງ ກ່າວພວກເຈົ້າຕ້ອງຢູ່ຢ່າງໝັ້ນຄົງ ແລະ ມີກຽຕ.

ກ່ອນຂ້າພະເຈົ້າຈະສິ້ນຊີວິດໄປ ຂໍຝາກຄວາມຮຽກຮອ້ງນີ້ ໄວ້ໃຫ້ພີ່ນ້ອງຮ່ວມຊາຕທັງຫລາຍ ຈົ່ງເອົາໃຈໃສ່ສູ້ຊົນປະຕິບັຕ ຂ້າພະເຈົ້າເຊື່ອແນ່ວ່າ: "<u>ປະເທສຊາຕຂອງພວກເຮົາ ຈະຕ້ອງຢູ່ຢ່າງໝັ້ນຄົງ ເປັນປະເທສລາວຕໍ່ໄປ ".</u>



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com






*<u>ຮູບທີ່ 143</u> (ຊ້າຍ). ເຈົ້າ ສູພານຸວົງສ໌ ຮູບຖ່າຍບໍ່ດົນກ່ອນ ສິ້ນພຣະຊົນມ໌. <u>ຮູບທີ່ 144 (ຂວາ).</u>ເຈົ້າສຸພານຸວົງສ໌ ແລະ ໝ່ອມວຽງຄຳ ໃນວັນແຕ່ງງານສົມຣົດ ທີ່ຍາຈ່າງວຽດນາມ ວັນທີ່ 19 ເດືອນມັງກອນ (January) 1938 ທາງວຽນຖິກີນາມ ອາຍຸ 18 ປີ. Nguyen Thi Kinam (ໝ່ອມວຽງຄຳ) ນາງເປັນ ສາວ ວຽດນາມ ຄົນໜຶ່ງ ທີ່ມີຄວາມຮູ້.*

## ພຍາພູມີວົງວິຈິດ



*<u>ຮູບທີ່ 145.</u> ພຣະຍາ ພູມີ ວົງວິຈິດແລະພັລະຍາ ຮູບຖ່າຍໃນປີ 1979 ທີ່ວຽງຈັນທ໌ນ.*

ພຣະຍາ ພູມີ ວົງວິຈິດ ເກີດວັນທີ່ 6 ເດືອນເມສາ (April)1909, ເຖິງແກ່ກັມໃນວັນທີ່1 ເດືອນ ກໍຣະກະດາ (July) 1994 ແມ່ນນັກຕໍ່ຕ້ານກູ້ຊາຕ ແຕ່ສໄມປີ 1945 ຈົນເຖິງປີ 1975, ທີ່ໄດ້ເຂົ້າຮ່ວມ ກັບວຽດນາມເໜືອ ຄ.ມ.ນ. ຜົນສຸດທ້າຍ ແມ່ນປິດແອກໄມ້ອອກ ໄດ້ເອົາແອກເຫລັກ ມາໃສ່ຄໍ ປະຊາຊົນລາວໜັກກວ່າ ເກົ່າ ເພາະວ່າປະຈຸບັນ ວຽດນາມຄູມທຸກຢ່າງຢູ່ໃນລາວ. ທ່ານເປັນ ຜູ້ເຊັນສັນຍາ ຈັດຕັ້ງຣັຖບາລປະສົມ ຄັ້ງທີ່ສາມໃນປີ 1973 ຮ່ວມກັບພນະທ່ານ ເພັງ ພົງສວັນ ແມ່ນຣັຖບາລຈອມປອມ ເພາະແມ່ນລາວເຊັນ ແຕ່ມັນໃຊ້ການບໍ່ໄດ້ໃຫ້ຄົນລາວ ແຕ່ໃຊ້ການໄດ້ໃຫ້ແກວ. ໄກສອນພົມວິຫານ ຈຶ່ງເຊັນລາວໃຫ້ ແກວມາປົກຄອງ 25 ປີ ໃນວັນທີ່ 18 ເດືອນກໍລະກະດາ 1977. ຫລັງຈາກ 25 ປີ ກໍຕ້ອງ ເຊັນຕໍ່ແຕ່ລະ 10 ປີ ບໍ່ມີສິ້ນສຸດ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 10.

# ແຜນການລຶກລັບແລະຫລອກລວງຂອງຄອມມຸຍນິສ

## ກ- ການວາງແຜນກືນກິນລາວໃນລະຍະສັ້ນ

ຄອມມຸຍນິສ ພະຍາຍາມ ດູດດຶງເອົາປະຊາຊົນລາວ ເພື່ອສ້າງພື້ນຖານແລ້ວ ທຳການປະຕິວັດ ໃຫ້ຕໍ່ ຕ້ານ ຜູ້ນຳຂອງເຂົາ. ຄອມມຸຍນິສຕ້ອງຊ່ວຍ ຕ້ອງຢູ່ໃກ້ສິດ ນຳປະຊາຊົນລາວ ເຂົາຄັດເລືອກເອົາປະຊາ ຊົນ ລາວ ຜູ້ມີຄວາມຄຽດແຄ້ນຕໍ່ເຈົ້ານາຍ, ຫລື ຜູ້ນຳຂອງຕົນ. ຄົນຈຳພວກນີ້ ຖືກເລືອກເຂົ້າໄປເປັນສມາຊິກ ຖາວອນຂອງພັຄ ຄ.ມ.ນ. ແລ້ວ ກໍສອນການຕໍ່ສູ້, ການຝຶກລັທທິຄອມມຸຍນິສ ໃຫ້ຄົນຈຳພວກນີ້ ເພື່ອໃຫ້ ມີຫົວຕໍ່ສູ້ຢ່າງ ເອົາຈິງເອົາຈັງ. ຕົວຢ່າງ: ຜູ້ທີ່ມີຄວາມແຄ້ນ ຍ້ອນເອື້ອຍ, ອ້າຍ, ພໍ່ແມ່, ລູກ ຫລື ຍາດຕິພີ່ ນ້ອງທີ່ຮັກແພງ ໄດ້ຖືກຝ່າຍຕົງກັບຂ້າມ ຈັບຫລື ຖືກຂ້າ, ຄ.ມ.ນ. ເລືອກເອົາຜູ້ທີ່ມີຖານະຍາກຈົນ ແຕ່ ມີ ຄວາມໄຝຝັນສູງ, ຄົນຈຳພວກນີ້ ເຂົ້າໄດ້ງ່າຍໃຊ້ໂອກາສແຊກຊຶມໄດ້ໄວ ຄົນປະເພສນີ້ເຊື່ອ ແລະ ຟັງ ຄວາມໂຄສະນາໄດ້ງ່າຍ,ເອົາຈິງເອົາຈັງ ນຳການຕໍ່ສູ້ຢ່າງເຂັ້ມຂົ້ນ. ການຊັກຊວນຊາວໄຮ່ຊາວນາ ຜູ້ທີ່ ຢູ່ ຫ່າງໄກໃນເມືອງ, ຂາດການຕິດຕໍ່ຈາກຣັຖບາລ. ປະຊາຊົນຊະນິດນີ້ ຄອມມຸຍນິສ ສົ່ງນັກ ໂຄສະນາໄປ ຄົ້ນຄ້ວ, ໄປອາໄສ້ຍຢູ່ນຳແລ້ວ ຈອບອອຍເອົາ ຫລື ເອົາເງິນຈ້າງ ໃຊ້ໃຫ້ເຮັດແນວທີ່ຢູ່ໃນການສົງໄສ້ຍ ຂອງ ຝ່າຍຣັຖບາລ ເມື່ອຕົກຢູ່ໃນສະພາບມີການຕໍ່ສູ້, ຄອມມຸຍນິສ ກໍເບີກອາວຸດໃຫ້ລົງມືຕໍ່ສູ້ ເມື່ອ ມີ ການຕໍ່ສູ້ ກໍມີການເສັຍຫາຍ ຈຶ່ງເກີດຄວາມແຄ້ນຮ້າຍແຮງຂຶ້ນ ຄ.ມ.ນ. ກໍສົ່ງກຳ ລັງໄປໜູນຫລັງ ແລ້ວ ກໍຄູມ ການຕໍ່ສູ້ ຕາມແຜນ.

ການເຈຣະຈາຢຸດຍິງ ໃນວັນທີ່ 1/27/1973 ທີ່ປາຣີ ປະເທສຝຣັ່ງເສສ ຣະຫວ່າງ ສະຫາຣັຖ ແລະ ວຽດ ນາມເໜືອ ໄດ້ເຮັດໃຫ້ລາວແດງ ຜູ້ເປັນລູກນ້ອງ ບໍ່ມີສິທເຂົ້າຮ່ວມກອງປະຊຸມ ແຕ່ ໃຫ້ລໍຮັບຄຳສັ່ງ ຢ່າງ ດຽວ ແລ້ວ ວຽດນາມເໜືອ ຈະແບ່ງ ຜົລປະໂຍດໃຫ້. ເມື່ອໄດ້ຮັບໄຊ໌ຍຊນະ ຜົລປະໂຍດ ທີ່ລາວແດງໄດ້ ຮັບ ກໍຄືເອົາເມືອງລາວ ໄປຖວາຍໃຫ້ນາຍເໜືອຫົວ ຂອງພວກເຂົາ ຕາມແຜນການຂອງ ໂຮຈິມິນ ທີ່ໄດ້ ຕັ້ງ ພັຄຄອມມຸຍນິສອິນດູຈີນຂຶ້ນ. ຕ້ອງໃຊ້ໜີ້ເລືອດທີ່ ວຽດນາມເໜືອ ທີ່ໄດ້ມາຕາຍຢູ່ໃນຜືນ ແຜ່ນດິນ ລາວ ຕາງລາວແດງ. ວຽດນາມເໜືອ ຈຶ່ງໄດ້ລະເມີດ ສັນຍາໃນເດືອນ 7/20/1954 ແລະ 7/23/1962 ໄດ້ຫ້າມບໍ່ໃຫ້ທະຫາຣຕ່າງດ້າວ ແຊກແຊງ ກິດຈະການ ພາຍໃນຂອງ ລາວພ້ອມກັບຄວາມເປັນກາງ, ແຕ່ ວຽດນາມເໜືອ ໄດ້ລຸກລານລາວ ຢ່າງເປີດເຜີຍສເມີມາ ໂດຽບບໍ່ຢ້ານ ແລະບໍ່ໄດ້ຢຳ ເກັງຕໍ່ຊາວໂລກ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຊີນອ່ານແຜນການລົບລ້າງຝ່າຍວຽງຈັນ ຈາກລາວ ຄ.ມ.ນ. ຜູ້ເປັນລູກນ້ອງຊັ້ນຈຳ ຂອງ ວຽດນາມເໜືອ ທີ່ໄດ້ເຮັດໃຫ້ຄົນລາວ ແຕກແຍກກັນ ເພື່ອຫວັ່ງເອົາຜືນແຜ່ນດິນຂອງລາວໃຫ້ເປັນທົວເມືອງຂຶ້ນແບບໃໝ່.

ເຈົ້າສູວັນນາພູມາ ຄືນັກກິລາເຕະບານ, ໄດ້ແທກຄອກອອກຈາກທີມຂອງຕົນ ໄປເຂົ້າຮ່ວມກັບ ທີມເຕະບານໃໝ່ ແຕ່ຕົນເອງບໍ່ໄດ້ຮູ້ນະໂຍບາຍໄທວພິກການເຕະບານຂອງທີມໃໝ່. ຄິດວ່າຕົນເອງ ແມ່ນເຈົ້າແລ້ວ ຈະເຮັດຫັຽງກໍໄດ້ໝົດ, ແຕ່ຄວາມຄິດນີ້ ມັນລ່າສະໄມໄປ ເພາະວ່າສະພາບການຂອງໂລກ ໃນເວລາ ນັ້ນ ໄດ້ປ່ຽນແປງໄປເປັນສອງຣະບອບ ຄື: ເສຣີປະຊາທິປະໄຕ ແລະ ສັງຄົມນິຍົມຄອມມຸຍນິສຕ໌ ລັທທິ ສັງຄົມນິຍົມຄອມມຸຍນິສຕ໌ ແມ່ນ ລັທທິປາບ ລັທທິສັກດີນາ (ປາບເຈົ້າຈອມ) ຄອມມຸຍນິສຕ໌ ຈຶ່ງບໍ່ມັກທູງຊາຕ <u>ຊ້າງສາມຫົວ</u> ເພາະຕີຄວາມໝາຍ "ສາມເຈົ້າລາວ" ຈຶ່ງເອົາທູງໃໝ່ ກາເດືອນ ມາປ່ຽນ ເປັນທູງ ຊາຕລາວ ໃນປະຈຸບັນ.




*<u>ຮູບທີ່ 146</u>. ຮູບທຸງຂອງ ສປປລ ແລະ ຮູບທູງ ພັຄຄອມມຸຍນິສຕ໌ ອິນດູຈີນ "ກາເດືອນ" ເຣີ່ມມາໃຊ້ແຕ່ເດືອນທັນວາ ວັນທີ່ 2, 1975.*

ໃນເມື່ອເຈົ້າສູວັນນາ ໄດ້ຕັດສິນໃຈໄປຮ່ວມໂລກຄອມມຸຍນິສຕ໌ ເພີ່ນເອງ ກໍໝົດສິຕ ແລະ ບໍ່ມີຄວາມໝາຍຫັຽງ ພຽງແຕ່ເປັນເຄື່ອງມືຮັບໃຊ້ ນະໂຍບາຍ ແລະ ຜົລປະໂຍດ ຂອງຄອມມຸຍນິສຕ໌ <u>ຄຳໂບຮານສອນວ່າ, ຮ່ວມກັນເຮົາຢູ່ ແຕກໝູ່ເຮົາຕາຍ</u> ມັນເປັນຄວາມຈິງແທ້, ເຈົ້າສູວັນນາພູມາໄດ້ແຕກໝູ່ (ຝ່າຍວຽງຈັນທນ໌) ໄປຮ່ວມກັບລູກສະມູນຊັ້ນຈຳ ຂອງຄອມມຸຍນິສຕ໌ ວຽດນາມເໜືອຄື: ນາຍໄກສອນ ພົມວິຫານ, ນາຍຄຳອວັນ ບູບຜາ ແລະ ນາຍພູມີ ວົງວິຈິດ ທີ່ເປັນກະແຈສຳຄັນ ໄດ້ໄຂປະຕູບ້ານ ເອົາຄອມມຸຍນິສຕ໌ ເຂົ້າມາຄອບຄອງປະເທສລາວ. ສິ່ງທີ່ສໍ່ໃຫ້ເຫັນຢ່າງຈະແຈ້ງ ທີ່ສຸດກໍຄື: ເຈົ້າສູວັນນາພູມາ, ເຈົ້າສູພານຸວົງສ໌ ສອງສະເດັດ ແມ່ນເຈົ້າຈອມລາວ ທີ່ມີການສຶກສາສູງມາຈາກຝຣັ່ງເສສ ແລະ ກໍສູງກວ່າລາວຫລາຍຄົນ ຍັງເປັນຜູ້ລິ້ເລີ່ມ ການກູ້ຊາຕຈາກການເປັນທົວເມືອງຂຶ້ນຂອງຝຣັ່ງເສສ, ແຕ່ເມື່ອສວັນນະຄິດ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແລ້ວ ຈຶ່ງບໍ່ມີຮູບປັ້ນເປັນຂອງ ຈາລຶກໄວ້ ໃນປວັດສາຕຂອງລາວ. ຈຶ່ງມີແຕ່ຮູບຂອງ ໄກສອນ ພົມວິຫານ ຜູ້ເປັນ ລູກວຽດ ມາເຕີບໂຕຢູ່ລາວ ເພາະແມ່ນ ພັຄຄອມມຸຍນິສຕ໌ອິນດູຈີນ ເປັນຜູ້ສັ່ງ ຈຶ່ງໄດ້ສ້າງອານຸ ສາວະຣີ ໃຫ້ໄກສອນ ເປັນປວັດສາຕໄວ້ ແລະ ເປັນວິຣະບູຣຸດ ເພາະໄກສອນ ເປັນຜູ້ໄດ້ເຊັນສັນຍາ ມິດຕະພາບ ລາວ ຄ.ມ.ນ. ແລະ ວຽດນາມ ຄ.ມ.ນ. ໃນເດືອນກໍຣະກະດາ ວັນທີ່ 18 ເດືອນ ກໍລະກະດາ (July) 1977, ໄດ້ມອບອຳນາດໃຫ້ ວຽດນາມ ຄ.ມ.ນ. ມາປົກ ຄອງລາວ 25 ປີ ຈົນເຖິງ 2002 ຫລັງຈາກນີ້ ຕ້ອງເຊັນຕໍ່ ຄັ້ງລະ 10 ປີ ບໍ່ມີສີ້ນສຸດ (ປະຈຸບັນ 2012 ເປັນ 35ປີເຕັມໆ )

ລາວ ຄ.ມ.ນ. ມີນາຍພົນຫລາຍທ່ານ, ມີຣັຖມົນຕຣີຫລາຍທ່ານ ທີ່ມີຄວາມຮູ້ ມີຄວາມສາມາຕ ແຕ່ບໍ່ໄດ້ເອົາໄປເປັນຣັຖມົນຕຣີກະຊວງຍຸຕິທັມຂອງ ສປປລ. ພວກເຂົາໄດ້ເລືອກເອົາ ນາຍຄຳອ້ວນ ບູບຜາ ຜູ້ໄດ້ຖືກຍອ້ງຍໍ ຈາກໄກສອນ ພົມວິຫານ ວ່າ: ບອກໄດ້ໃຊ້ຟັງ ເປັນຣັຖມົນຕຣີ ກະຊວງປ້ອງກັນປະເທສ (ຝ່າຍທະຫາຣ), ເພື່ອວາງແຜນລົບລ້າງກຳລັງທະຫາຣຝ່າຍວຽງຈັນທນ໌ ເມື່ອໄດ້ອຳນາຕຢ່າງສົມບູນແລ້ວ, ໄດ້ຖືກຄັດເລືອກ ມາເປັນຣັຖມົນຕຣີກະຊວງ ຍຸຕິທັມ ຈຸດປະສົງ ແມ່ນຕຽມໃນ ຕອນທ້າຍ ມີສິດເດັດຂາດ ຢາກຕັດສິນປະຫານ ຊີວິດ ຜູ້ໃດ ຄົນໃດ ກໍໄດ້ ແລະ ສັ່ງໄດ້ຕາມໃຈ ເພາະລັທທິພະເດັດການ ປົກຄອງ ໂດຽ ພັຄດຽວ ບໍ່ມີໃຜຕໍ່ວ່າໄດ້. ກະຣຸນາອ່ານ ຄຳນຳ ຂອງ ນາຍພົນ ຄຳອ້ວນ ບູບຜາ ວັກສຸດທ້າຍ ໄດ້ຂຽນ ຫົວຂໍ້ວ່າ: "ເຮັດແນວໃດຈະຮັກສາ ຕົ້ນດອກຈຳປາ ທີ່ແສນຮັກບໍ່ໃຫ້ຫ່ຽວແຫ້ງ".

ນາຍພົນຄຳອ້ວນ ຢ້ານຕົກໄປເປັນທາສ ຂອງວຽດນາມເໜືອ ຍ້ອນແຜນຫລອກລວງຂອງເພິ່ນ ທີ່ໄດ້ເອົາຜູ້ນຳ ແລະ ຄົນສຳຄັນ ອອກຈາກໜ້າທີ່ ໄປຂ້າຖີ້ມຢູ່ສູນດັດສ້າງ ເມືອງວຽງໄຊ, ໄດ້ເຮັດໃຫ້ຜູ້ນຳຫລາຍທ່ານ ໄດ້ລີ້ພັຍ ໄປເປັນອົພຍົບ ຢູ່ຕ່າງປະເທສ. ນາຍພົນ ຄຳອ້ວນ ຈຶ່ງມີຄວາມກັງວົນ ເພາະເຫັນປະຊາຊົນ ທຸກຂ໌ຍາກ ຂາດແຄນ, ຂາດຜູ້ນຳ, ຂາດຜູ້ມີຄວາມຮູ້, ຄວາມສຳນານ, ນັກຊ່ຽວຊານ, ເຮັດໃຫ້ ປະເທສລາວ ປ່ຽນສະພາບໄປເປັນປະເທສຫລ້າຫລັງ ທຸກຂ໌ຍາກທີ່ສຸດໃນໂລກ. ບໍ່ເທົ່ານັ້ນ ຍັງເປັນລູກນ້ອງແກວອີກ ເຮັດໃຫ້ແກວມາເຕັມບ້ານເຕັມເມືອງ, ປະຊາຊົນລາວບໍ່ມີວຽກງານທຳຕ້ອງໄດ້ ໄປຮັບຈ້າງ, ໄປຂາຍຕົວຢູ່ຕ່າງປະເທສ, ໄປປະສົມພັນ ກັບ ວຽດ ກັບ ປະເທສໄກ້ຄຽງ ເພື່ອເອົາຊີວິດລອດ ຈົນເຖິງປະຈຸບັນ ປະຊາຊົນລາວຍິ່ງໜີອອກຈາກປະເທສ ວຽດ ຍິ່ງເຂົ້າມາແທນຫລາຍຂຶ້ນ ມາເອົາ ດິນດອນ ຕອ່ນຫຍ້າ ລ້າໆ ຫລື ຊື້ຖືກໆ. ຄົນຕ່າງດ້າວໄດ້ມາເໝົາທຸກຢ່າງ ລວມທັງຊັພໃນດິນ ສິນໃນນ້ຳ ໃນລາວ ບໍ່ດົນຄ້າງໜ້ານີ້ ຕ້ອງໝົດໄປ ບໍ່ມີຫັຽງເຫລືອອີກ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ຂ- ແຜນກືນກິນລາວຖາວອນ

ໃນທ້າຍປີ 1981, ໄດ້ມີຄອບຄົວອົພຍົບລາວ ຄອບຄົວນຶ່ງມາເຖິງສະຫາຣັຖ. ຂ້າພະເຈົ້າເປັນຜູ້ສຳພາດ: ໃດ້ຖາມຄອບຄົວນີ້ວ່າ:"*ຄອບຄົວທ່ານໜີເຂົ້າປະເທສໄທຍ໌ປີໃດ?*" ຫົວໜ້າຄອບຄົວຕອບວ່າ "*ໜີມາໄດ້ເກືອບຫ້າເດືອນແລ້ວ*". ຂ້າພະເຈົ້າຖາມຕື່ມວ່າ "*ເປັນຫັຍງຈຶ່ງໄດ້ມາສະຫະຣັຖໄວແທ້?*" ຜູ້ອົພຍົບຕອບວ່າ "*ເພາະມີລູກຕອັນເອີງ ແລະໄດ້ຮັບໃຊ້ເປັນທະຫາຮກອງທັບລາວ*". ຖາມຕື່ມວ່າ:"*ເປັນຫັຍງ ຈຶ່ງນານໜີແທ້? ບໍ່ມາແຕ່ 1975?*" ທ່ານຕອບວ່າ "*ຢາກໜີເຕັມທີຍ້ອນບໍ່ຮູ້ພາສາ ຂາດຜູ້ນຳພາໜີ ແລະ ບໍ່ຮູ້ຈະເພິ່ງໃຜ, ຕອນສຸດທ້າຍ ເຫັນວ່າຢູ່ຕໍ່ໄປບໍ່ໄດ້ ຍ້ອນບໍ່ມີສິດເສຣີພາບ ຖືກເຂົາຊື້ງຊອມແນມເບິ່ງ ແລະ ດ່າ ຢູ່ຕລອດເວລາ ວ່າພວກປະຕິການບໍ່ມີສິດເປັນລາວ ແລະ ເປັນເຈົ້າຂອງໃນສິ່ງຂອງທີ່ມີມານັ້ນ ເພາະແມ່ນໄດ້ມາຈາກການຂາຍຊາຕ ເປັນລູກແລ້ງຕີນມືຂອງຈັຕກະພັຕ*". ຜູ້ຂຽນຖາມອີກວ່າ "*ເປັນຫັຍງຈຶ່ງວ່າບໍ່ເປັນເຈົ້າຂອງສິ່ງທີ່ເຮົາມີ?*" ຜູ້ກ່ຽວຕອບວ່າ "*ວຽດມິນ ມາຄູນທຸກຢ່າງ ອັນໃດກໍຕົກໄປເປັນຂອງຫລວງ ບໍ່ແລ້ວເທົ່ານັ້ນ ຍັງດ່າທຸກມື້ວ່າ ບັກຊີໄອເອ (CIA), ຈຶ່ງໄດ້ຕັດສິນໃຈໜີ ໄປຕາຍດ້ານໜ້າ ດີກ່ວາຢູ່ ໃຫ້ເຂົາກົດຂີ່ຂົ່ມເຫັງ.*"

ຕາມຂ່າວ ຍັງມີເຫຕການ ຕ່າງໆຫລາຍຢ່າງ ເກີດຂຶ້ນ ກັບວຽດນາມຄອມມຸຍນິສຕ໌ ຄື: ຍັບສາຍແດນເຂົ້າໄປໃນພືນແຜ່ນດິນຂອງລາວ ເລີກເຂົ້າໄປ ຊາວກວ່າ ກິໂລແມຕຮ໌ (20 ກິໂລແມຕຮ໌), ແຕ່ສຳຫລັບລວງຍາວ ແຕ່ເໜືອຕລອດໃຕ້ ບໍ່ມີໃຜ່ຮູ້, ບໍ່ມີຜູ້ໃດ ຕໍ່ວ່າ ຕໍ່ຂານໄດ້. ເຣື່ອງໃຫ່ຍໄປກ່ວານີ້ ແມ່ນແຜນການສ້າງສາ ພັທນາ ຖນົນຫົນທາງ, ຕັດໄມ້, ປຸກບ້ານໃໝ່, ຍົກຍ້າຍປະຊາຊົນລາວ ອອກຈາກພື້ນທີ່ ເພື່ອຕັ້ງກອງທັພ ວຽດນາມຄອມມຸຍນິສຕ໌ໃສ່ ຫລືເອົາປະຊາຊົນວຽດນາມ ມາຢູ່ແທນ ຫ້າມບໍ່ໃຫ້ປະຊາຊົນລາວເຂົ້າໄປໄກ້, ນີ້ແມ່ນແຜນການກືນກິນລາວ ຢ່າງຖາວອນ.




*ຮູບທີ່ 147.ແຜນການຄັ້ງຍິ່ງໃຫ່ຍທີ່ແກວຄອມມຸຍນິສ ວາງແຜນກືນກິນລາວ ເປັນສາມຂັ້ນຄື ຂັ້ນຕົ້ນ(1)ເຂົ້າໄປຍຶດພື້ນທີ່ ພູເຂົາປ່າດົງແລະ ປະຊາຊົນ. ຂັ້ນທີ່ສອງ(2) ຍຶດໝູ່ບ້ານ ແລະໂຈມຕີ ຕັດທາງຖນົນ ກໍ່ຄວາມວູ້ນວາຍ ແລະຂັ້ນທີ່ສາມ (3)ໃຊ້ກຳລັງທະຫານເຂົ້າໂຈມຕີເພື່ອເອົາໄຊຊນະ ແລ້ວຕັ້ງທີ່ໝັ້ນ ຢູ່ເລີຍບໍ່ຍອມອອກ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເດັກທີ່ເກີດຫລັງຈາກສັນຍາ ລາວ/ວຽດ ທີ່ ນາຍໄກສອນ ພົມວິຫານ ໄດ້ເຊັນໃຫ້ ວຽດ 25 ປີ ຜ່ານມານັ້ນ ແມ່ນລູກຊອດ ໄດ້ຮຽນລັກສູດ ຄ.ມ.ນ. ຄົບຖ້ວນ ພ້ອມແລ້ວ ທີ່ຈະມາປົກຄອງລາວ ຢ່າງຫ້າວຫານ, ຕຽມ ພ້ອມເປັນຜູ້ນຳໃຫ້ການປົກຄອງລາວ ໃຫ້ລາວກາຍເປັນແຂວງນຶ່ງ ຂອງ ວຽດນາມ ຄ.ມ.ນ. ພັຄອິນດູຈີນ. ໃນບໍ່ດົນນີ້ ປວັດສາຕ, ປະເພນີ, ວັທນະທັມ ແລະ ການເຊື່ອຖື ຂອງ ປະຊາຊົນລາວ ຕ້ອງຖືກລົບລ້າງໄປ ຢ່າງແນ່ນອນ ປະຊາຊົນລາວ ຈະກັບກາຍ ເປັນຄົນບໍ່ມີຊາຕ, ຈະຖືກກົດຂີ່ ຂົ່ມເຫັງ ຢູ່ພາຍໃຕ້ ອຳນາດ ພະເດັດການ ຄ.ມ.ນ. ພັຄດຽວ ດັ່ງປະຈຸບັນນີ້.

ດ້ວຍເຫຕຜົນເຫລົ່ານີ້ ຈຶ່ງເຮັດໃຫ້ປະຊາຊົນລາວຫລາຍຄົນຕັດສິນໃຈໜີໄປສ່ຽງໄພຍ໌ ຊອກຫາຊີວິດໃໝ່ ອັນມືດມົນ ບໍ່ຮູ້ອານາຄົດ ຈະລົງເອີຍໄປແບບໃດ ຢູ່ໃນຕ່າງປະເທສ. ເໜືອໄປກວ່ານີ້ ວຽດນາມ ຄ.ມ.ນ ແມ່ນ ຜູ້ຄູມກຳລັງ ທະຫາຣ ທັງໝົດ ຂອງ ສ.ປ.ປ.ລ. (ລາວຄ.ມ.ນ) ບໍ່ມີກອງທັພ, ບໍ່ມີອາວຸທໜັກ ເພື່ອ ປ້ອງກັນປະເທສ ມີແຕ່ທະຫາຣບ້ານ ແລະ ຕຳຣວຈ ຖືປືນອາກາ ຍິງໄກບໍ່ເກີນ 25 ຫລາ ແລະ ປືນ ສັ້ນ ເທົ່ານັ້ນ. "ຄຳໂບຮານ ລາວສອນວ່າ ເຊື່ອຄວາມວຽດ ເສັຍແນວເຂົ້າປູກ "ສູພານຸວົງສ໌ ແລະສູວັນ ນາພູມາ ເຊື່ອແກວ, ເຈົ້າຈອມຂອງລາວຈຶ່ງ ຕ້ອງສິ້ນສຸດລົງ ໃນປີ 1975."




*<u>ຮູບທີ່ 148</u>. ແມ່ນແຜນທີ່ ທີ່ສໍ່ໃຫ້ເຫັນວ່າວຽດນາມຄອມມູຍນິສຕ໌ ກືນກິນລາວໄປແລ້ວດັ່ງ ເຄື່ອງໝາຍສີແດງແມ່ນເອົາ ຕາຍຕົວໄປແລ້ວສີຟ້າມືດ ແມ່ນສ້າງສາພັທນາຖາວອນໃສ່; ສີຟ້າຂາວແດ່ແມ່ນຄ້າຍທະຫານ ແລະບ່ອນທຳມາຫາກິນຖາ ວອນຂອງວຽດນາມຄອມມູຍນິສ ຄົນລາວແມ່ນ ບໍ່ມີສິດເຂົ້າໄປໄກ້ໄດ້ ເລີ່ມແຕ່ 1965.*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ຄ- ແຜນຢຶດອຳນາຕດ້ວຍກຳລັງ

ສັນຍາລະຫວ່າງສະຫາຣັຖ ແລະ ວຽດນາມເໜືອ ທີ່ປາຣີສ ເດືອນມົກະຣາ ວັນທີ່ January 27, 1973 ໄດ້ອຳນວຍໃຫ້ຟ່າຍວຽດນາມເໜືອ ສົ່ງກອງທັພຂອງຕົນເຄື້ອນເຂົ້າໄປຍຶດລາວ, ຂເມນ ແລະວຽດນາມໃຕ້ ໄດ້ ຢ່າງງ່າຍດາຍ ດັ່ງນີ້: ໃນ ກາງປີ 1974 ຂເມນໄດ້ຕົກຢູ່ພາຍໃຕ້ການຄວບຄູມຂອງວຽດນາມເໜືອຢ່າງສິ້ນເຊີງ, ຕົ້ນປີ 1975 ສະຫາຣັຖ ແລະ ວຽດນາມໃຕ້ ໄດ້ແຕກໜີ ອອກໄປຈາກວຽດນາມໃຕ້ຢ່າງບໍ່ເປັນລະບຽບ. ໃນເດືອນ ພຶດສພາ 1975, ປະເທສລາວໄດ້ຕົກໃຫ້ລາວ ຄ.ມ.ນ. ແລະ ວຽດນາມເໜືອ ຢ່າງສິ້ນເຊີງ ລາວຫລາຍຮ້ອຍພັນຄົນໄດ້ ອົພະຍົບອອກຈາກປະເທສ ຫລື ຖືກຈັບໄປສັມມະນາ ທີ່ວຽງໄຊ ແຂວງຫົວພັນ. ທະຫາຣພາຄ 2 ໄດ້ບິນອອກໄປສູ່ ອຸດອນ ຣາຊອານາຈັກໄທ໌ຍ ໃນເດືອນພຶດສພາ May 14, 1975 ເປັນມື້ສຸດທ້າຍ ໃນເວລາປະມານ 11 ໂມງເຊົ້າ.

ສັນຍາທີ່ ປາຣີ ລາວສອງຝ່າຍໄດ້ຕົກລົງເຊັນສັນຍາ ໃຫ້ມີເຂຕປັກລັກ ຢູ່ເຂຕຂອງໃຜ່ ຂອງລາວ ແຕ່ລາວ ຄ.ມ.ນ. ໄດ້ເອົາສັນຍານີ້ ເປັນເຄື່ອງມື ລະເມີດບຸກລຸກ ກຳລັງຂອງຝ່າຍຂວາ ທີ່ໝົດທາງສູ້ ເພາະ ສະຫາຣັຖ ໄດ້ຖອນການຊ່ວຍເຫລືອທຸກຢ່າງ ເປັນໂອກາສໃຫ້ພວກ ຄ.ມ.ນ. ວຽດນາມເໜືອ ໄດ້ສົ່ງ ກຳລັງທະຫາຣ ພ້ອມດ້ວຍອາວຸທທຸກຊນິດ, ຈາກ ທົ່ງໄຫຫີນ ລົງໃສ່ ສະລາພູຄູນ ເຖິງຂົວເຫລັກ, ນ້ຳລິຕ, ຫີນເຫີບ, ທ່າລາດ, ກ້ຽວເຂົ້າໄປໃສ່ພາຄ 2 ໂດຽຜ່ານແຖວນາຊູ, ບ້ານຊອັນ ເພື່ອຕັດຫລັງກອງບັນ ຊາການທະຫາຣ ພາຄ 2 ຢູ່ລ່ອງແຈ້ງ. ທາງດ້ານທິສເໜືອ ສັດຕຣູໄດ້ເຄື້ອນກຳລັງ ລົງໄປຈາກບ້ານນາ ຫາພູຫລວງມາດ ເຂົ້າໃສ່ຊຳທອງ ແລະບ້ານຫີນຕັ້ງ ເພື່ອຕຽມບຸກເຂົ້າລ່ອງແຈ້ງ ໄດ້ທຸກໂອກາສ ແຕ່ ພວກມັນລໍຈັງວະ ໃຫ້ຕອັນໄດ້ ປາ ທຸກຕົວ ເຂົ້າຄອັງເສັຍກ່ອນ ຈຶ່ງລົງມືເຂົ້າຍຶດບາດດຽວທົ່ວພຣະຣາຊ ອານາຈັກລາວ ເພາະພວກມັນ ບໍ່ຢາກໃຫ້ແຕກຕື່ນ ແລະ ລົບໜີໄປໄດ້ແມ້ແຕ່ຄົນດຽວ.

ອີກຢ່າງໜຶ່ງເວລານັ້ນພນະທ່ານ ເຈົ້າສີສຸກ ນະຈຳປາສັກ ຍັງເປັນຣັຖມົນຕຣີ ກະຊວງປ້ອງກັນປະເທສຢູ່ ຖ້າຫາກມີການ ສູ້ຣົບ ກັບຝ່າຍ ຄ.ມ.ນ. ອາດເປັນຜູ້ລະເມີດສັນຍາ ຕໍ່ໜ້າຊາວໂລກ. ລາວຄອມມຸຍນິສ ເປັນຝ່າຍໄດ້ປຽບ, ພວກເຂົາມີກຳລັງ ທະຫາຣ ວຽດນາມເໜືອ ສນັບສນຸນຢູ່ເບື້ອງຫລັງ ຫລາຍກອງພົນ ພວກເຂົາ ຢາກຍຶດອຳນາດເມື່ອໃດກໍໄດ້, ແຕ່ພວກເຂົາ ຕ້ອງໃຊ້ເລ່ຫລ່ຽມທາງການເມືອງ ຍຸຍົງປະຊາຊົນ ແລະ ນັກສຶກສາ, ຂ້າຣາຊການ ໃຫ້ລູກຂຶ້ນເດີນຂບວນ ຕໍ່ຕ້ານ ຂັບໄລ່ຝ່າຍຂວາ ວຽງຈັນທນ໌ ໃຫ້ອອກຈາກໜ້າທີ່. ຄອມມຸຍນິສຕ໌ເຊື່ອແນ່ນອນວ່າ ເມື່ອມີການເດີນຂະບວນ, ຝ່າຍວຽງຈັນທນ໌ ຕ້ອງຊອກວິທີແກ້ໄຂ ດ້ວຍການໃຊ້ກຳລັງປາບ ເວລານັ້ນແມ່ນໂອກາສໃຫ້ຄອມມຸຍນິສຕ໌ ມີສິດປາບຝ່າຍຂວາຢ່າງຖືກຕ້ອງ ຕາມກົດໝາຍສາກົນ ຫາເຣື່ອງໃສ່ວ່າ ແມ່ນ ຂ້າປະຊາຊົນຕໍ່ສານໂລກ. ແຕ່ການເດີນຂະບວນຂອງລາວ ຄ.ມ.ນ. ກັບພາໃຫ້ຝ່າຍຂວາ ຕັດສິນໃຈໄປລີ້ໄພ໌ຍຢູ່ຕ່າງປະເທສ ດັ່ງນີ້ ຝ່າຍຄອມມຸຍນິສເຫັນບໍ່ໄດ້ທ່າ ຈຶ່ງໄດ້ກວດລ້າງຄນະຣັຖມົນຕຣີ, ນາຍທະຫາຣ, ຕຳຣວດ ແລະ ຂ້າຣາຊການ ຝ່າຍວຽງຈັນທນ໌ ທັງໝົດ ທີ່



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຍັງຮູ້ ເລ່ຫລ່ຽມ ຫລອກຕົ້ມ ຂອງລາວ ຄ.ມ.ນ. ບໍ່ດີພໍ ໄປໃສ່ຄຸກຢູ່ສູນດັດສ້າງ ວຽງໄຊ ແຂວງຫົວພັນ ເປັນຈຳນວນ 46 ພັນຄົນ ອ້າງວ່າໄປສັມມະນາຝຶກຝົນ ແຕ່ເປັນຄຳຫລອກ ສ່ວນຫລາຍໄດ້ເສັຍຊີວິດ ຄາສູນ.

ໃນປີ 1979 ຈິນຕິແກວ ຈຶ່ງໄດ້ມີຈຳນວນນ້ອຍໆ ໄດ້ລອດຕາຍອອກມາ ແຕ່ກໍກາຍເປັນຄົນພິການ ໄຮ້ສຸຂະພາບ, ໄຮ້ສະຕິປັນຍາ. ລັດທິອຸບາດ ໄດ້ທຳລາຍມະນຸສ ຢ່າງບໍ່ມີຄວາມເມດຕາປຣານີ ດ້ອຍ ເຫຕນີ້, ຈຶ່ງໄດ້ມີຄຳທຳນວຍເຕືອນໄວ້ລ່ວງໜ້າ ໃນປີ ພ.ສ. 2500 ວ່າ: "ຍັກຈະມາເອົາຄົນລາວໄປກິນ ຜູ້ທີ່ບູນມີຈະຫລຸດພົ້ນ ໄປເພິ່ງຮົ່ມໂພທີ່ສຳລານ" ໝາຍຄວາມວ່າ: ຜູ້ທີ່ໄດ້ພົ້ນໄປຢູ່ຕ່າງປະເທສທົ່ວໂລກ ແມ່ນຜູ້ທີ່ບູນມີ ຈຶ່ງບໍ່ຖືກ ລາວ.ຄ.ມ.ນ. ເອົາໄປຂ້າຖິ້ມ ຫລື ເອົາໄປທໍຣະມານຢູ່ສູນສັມະນາ.

## ຜົລດີແລະຜົລເສັຍຂອງການເປັນອົພະຍົບ ໄປຢູ່ ຕ່າງປະເທສ

**ທ່ານນາຍພົນ ວ່າງປາວ ແລະ ຜູ້ນຳຫລາຍທ່ານ ໄດ້ຕັດສິນໃຈອອກຈາກເຂຕທະຫານ ພາຄ 2 ແລະ ພຣະຣາຊອາ ນາຈັກລາວ ນັ້ນກໍມີຜົລດີ ແລະ ຜົລເສັຍດັ່ງຕໍ່ລົງໄປນີ້:**

<u>ຜົລດີ</u>

ແມ່ນຫລີກເວັ້ນຈາກການນອງເລືອດກັນ ກັບທຸກຝ່າຍ. ເພາະປະຊາຊົນໃນເຂຕທະຫານ ພາຄ 2 ແລະ ພຣະຣາຊອານາຈັກລາວ ໄດ້ສູນເສັຍປະຊາຊົນ ຢ່າງຫລວງຫລາຍ ໃນປາງສົງຄາມແຕ່ປີ 1945-1975 ຍ້ອນ ວຽດ ຄ. ມ. ນ ເຂົ້າມາຂ້າ ຟັນລັນແທງຄົນລາວຢູ່ພາຍໃນປະເທສ. ນອກຈາກສູນເສັຍມະນຸສ ແລ້ວ ຍັງມີຊັພພະຍາກອນທັມມະຊາຕ ອັນສົມບູນ ຢູ່ເຂຕທະຫານ ພາຄ 2 ແລະ ທົ່ວພຣະຣາຊອານາຈັກລາວ ໄດ້ຖືກທຳລາຍໄປຢ່າງຫລວງຫລາຍ ແລະ ຫລາຍກວ່າທຸກໆປະເທສໃນໂລກ ຍ້ອນເສິກສົງຄາມ ຄ.ມ.ນ. ເຂົ້າມາ ລຸກລານ ຢາກໄດ້ເມືອງລາວ ແລະ ໃຊ້ຄົນລາວເປັນລູກນອ້ງ.

**ຄຳເວົ້າຂອງທ່ານນາຍພົນ ທົງລິດ ໂຈກເບົ່ງບູນ ໃນຕອນ ອົພະຍົບຢູ່ຕ່າງປະເທສ.**

"ພວກລູກແຫລ້ງຕີນມືຂອງ ຄອມມຸຍນິສຕ໌ແກວ ມີເລ່ຫລ່ຽມອັນເລິກແລບ ຫລອກໃຊ້ພວກ 21 ອົງການ ໃຫ້ລຸກຂຶ້ນປະທ້ວງຂັບໄລ່ຜູ້ນຳຝ່າຍຂວາ ອອກຈາກໜ້າທີການ. ຖ້າຝ່າຍຂວາເອົາກຳລັງຕໍ່ສູ້ ພວກຄ.ມ. ນ. ແນ່ນອນ ຕ້ອງເອົາເຣື້ອງ ນີ້ເຂົ້າສາລໂລກ ຫາເຣື່ອງວ່າ: ຝ່າຍຂວາ ເຂັ່ນຂ້າປະຊາຊົນ ເພາະວ່າພວກ 21 ອົງການ ລວ້ນແລ້ວແມ່ນແຕ່ນັກສຶກສາ ຂ້າຣາຊການ ພວກຜູ້ນຳ ຄ.ມ.ນ. ກໍມີຫລາຍ ຄົນນຸ່ງເຄື່ອງພົລ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຮືອນປະບິນຢູ່ນຳ. ຖ້າມີການຕໍ່ສູ້ດ້ວຍກຳລັງໃນຕອນນັ້ນ ອາດບໍ່ມີໂອກາສໄດ້ໄປຢູ່ຕ່າງປະເທສ ທີ່ຈະເຣີນ, ຈະບໍ່ຮູ້ທາຕແທ້ຄວາມຊົ່ວຂອງລາວຄອມມຸຍນິສຕ໌. " ພວກເຮົາ ທຸກຄົນ ຂໍສັລະເສີນທ່ານນາຍພິນ ທິງລິດ, ເພິ່ນສົມຄວນເປັນນາຍທະຫາຣ ທີ່ໄດ້ຮຽນຮູ້ ເຖິງ ເລ່ຫລ່ຽມຂອງ ຄ.ມ.ນ. ເພິ່ນຈື່ງສົມຄວນເປັນຜູ້ນຳແທ້.

ຂໍຈົດຈຳບູນຄູນຂອງເຫລົ່າປະເທສທີ່ມີທັມ ມີຈະຣິຍະທັມ ໄດ້ຮັບເອົາລາວອົພະຍົບໄປລ້ຽງດູ ຢູ່ໃນປະເທສ ຂອງເພິ່ນ, ໂດຽສະເພາະແມ່ນ ສະຫາຣັຖ ໄດ້ຮັບເອົາອົພະຍົບຈາກເຂຕທະຫາຣພາຄ 2 ແລະ ພຣະຣາຊອານາຈັກລາວ ຫລາຍທີ່ສຸດ ເພື່ອໄປຕັ້ງຖິ່ນຖານໃໝ່ ຢູ່ໃນສະຫາຣັຖ ຈື່ງໄດ້ມີໂອກາສເປີດຫູ ເປີດຕາເຫັນຄວາມຈະເຣີນກ້າວໜ້າຕລອດການສຶກສາ ເລົ່າຮຽນຂອງລູກຫລານ ລູ້ນເກີດໃໝ່ໃຫ່ຍລູນ. ຂໍສັນລະເສີນ ຜູ້ນຳລາວຫລາຍຄົນ ທີ່ໄດ້ເປັນຂົວສະພານ ໃຫ້ປະຊາຊົນຂອງຕົນໄດ້ໄຕ່ໜີອອກໄປນອກປະເທສ ບໍ່ໄດ້ຕົກເປັນເຫຍື່ອຂອງລັທທິຄອມມຸຍນິສຕ໌ ຍ້ອນເພິ່ນເຂົ້າໃຈ ແລະ ເຫັນເຫຕການທັນກັບເວລາ ຄື: ທ່ານນາຍພິລ ທິງລິດ ໂຈກເບັ່ງບູນ ແລະ ທ່ານນາຍພິນ ວ່າງປາວ. ເພິ່ນວ່າ "ພວກເຮົາໜີອອກໄປຢູ່ນອກປະເທສ ເພື່ອຫລີກເວັ້ນຈາກການໃສ່ຮ້າຍປ້າຍສີ ຂອງລາວຄອມມຸຍນິສຕ໌ ອີກຕໍ່ໄປ."

**<u>ຜົລເສັຍ</u>**

ເປັນຕົ້ນແມ່ນເຫຕການ ພັດພາກຈາກບ້ານເກີດເມືອງນອນ, ຈາກພີ່ນ້ອງ, ຈາກໝູ່ເພື່ອນຊນິດ ມິດ ສະຫາຍ ເຮັດໃຫ້ມີຄວາມຄິດຮອດ ອາໄລອາວອນຫາ ເປັນກຳພ້າປະເທສ ໂດຽບໍ່ນຶກຝັ່ນມາກ່ອນ, ອົພະຍົບລາວ ຢູ່ໃນຕ່າງປະເທສ ເສັຍສິດທິ ເປັນຂອງຕົວເອງ, ເສັຍປະເພນີ ຮີດເກົ່າຄອງຫລັງ ແລະ ພາສາ ທຸກຢ່າງ ເປັນການເລີ່ມຕົ້ນໃໝ່; ສະເພາະຢ່າງຍິ່ງ ຜູ້ທີ່ມີ ອາຍຸສູງ ນັ້ນ ມີຄວາມຜິດຫວັງ ແລະໂສກເສົ້າ ຍ້ອນບໍ່ມີຄວາມສາມາດ ບໍ່ມີໂອກາດຈະໄດ້ພັທະນາ ປັບຕົວເອງອີກຕໍ່ໄປ. ໄດ້ປ່ອຍໂອກາສ ໃຫ້ພັຄ ລາວ ຄ.ມ.ນ. ມາປົກຄອງລາວ ພຽງພັຄດຽວ ບໍ່ປະຕິບັດຕາມສັນຍາ 18 ຂໍ້ ທີ່ໄດ້ເຊັ່ນກັນໄວ້ ກັບຝ່າຍຂວາ, ພວກເຂົາຍິ່ງທະວີຄູນ ກົດຂີ່ ຂົ່ມເຫັງ ມ້າງສິດທິເສຣີພາບ ຂອງປະຊາຊົນລາວ ທຸກເຜົ່າພັນ ທີ່ຍັງຕົກຄ້າງຢູ່ພາຍໃນປະເທສ ຫາຄວາມໃສ່ຮ້າຍປ້າຍສີ, ສ້າງຄວາມແຕກແຍກໃນສັງຄົມ, ເຮັດໃຫ້ຜົວຜິດເມັຍ, ຜິດລູກເຕົ້າ, ຜິດກັບຍາດຕິ ພີ່ນ້ອງ, ຊອກຈອບອອຍເອົາເປັນເຄື່ອງມືໃຊ້ ເພື່ອມ້າງເພ ສັງຄົມລາວ. ຊອກເອົາຄວາມຜິດຂອງຜູ້ບໍ່ໄດ້ເຮັດຜິດ ຫລື ຫາເຣື່ອງໃສ່ບຸກຄົນໃດ ບຸກຄົນໜຶ່ງ, ແລ້ວຄ.ມ.ນ. ກໍເອົາ ເປັນລັກຖານເພື່ອເປັນການໂຄສະນາ ແກ້ແຄ້ນ ຜູ້ເຄີຍຕໍ່ສູ້ກັບລາວ ຄ.ມ.ນ. ແລ້ວ ຈັບເອົາ ໄປລົງໂທສ, ປະຫານຊີວິດ ແລະເອົາໄປທໍຣະມານຢ່າງໂຫດຮ້າຍເຖື່ອນທີ່ສຸດ.

ເໜືອໄປກວ່ານີ້ ຝ່າຍລາວ ຄ.ມ.ນ.ໄດ້ລ້າງຜ່ານຂ້າຖິ້ມ ປະຊາຊົນລາວ ສວ່ນຫລາຍ ແມ່ນຊຸມຊົນ ເຜົ່າຕ່າງໆ ຄືເຜົ່າມົ້ງ ທີ່ໄດ້ໄປລີ້ຊ່ອນຢູ່ຕາມປ່າຕາມພູ ແລ້ວບໍ່ຍອມເຂົ້າມາຮວ່ມ ລາວ ຄ.ມ.ນ. ເພາະ ຢ້ານ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຖືກຂ້າຖິ້ມ ຫລືເອົາໄປສັມມະນາ ຢ່າງບໍ່ມີກໍານົດ ແລ້ວຈະບໍ່ໄດ້ເຫັນໂລກພາຍນອກແລະ ຄອບ ຄົວອີກ. ລາວ ຄ.ມ.ນ. ບໍ່ມີສາສນາ ບໍ່ຮູ້ບາບ ພວກມັນຮູ້ແຕ່ອໍານາຕເທົ່ານັ້ນ. ການໄປຕາມລ່າ ເຜົ່າ ຕ່າງໆ ຢູ່ຕາມ ພູຜາ ແມ່ນ ຄໍາແກ້ໂຕຂອງວຽດນາມ ຄ.ມ.ນ., ຄວາມຈິງ ແມ່ນໂອກາສໃຫ້ພວກເຂົາ ໄປປຸ້ນເອົາທຸກຢ່າງ ຂອງປະຊາຊົນລາວ ຢ່າງບໍ່ໄດ້ຈຽມໃຈຄື: ໄປຕັດໄມ້, ໄປຄົ້ນຊັພໃນດິນ ສິນໃນນໍ້າ, ບ່ອນໃດປູກຝັ່ງດີ ແລະ ງົດງາມ ພວກມັນກໍຢຶດເອົາເລີຍ ບໍ່ຍອມອອກ. ຍ້ອນເຫຕຜົລເຫລົ່ານີ້ ປະຊາຊົນລາວຈຶ່ງໄດ້ໂຕນໜີ ອອກຈາກປະເທສ, ໜີເຂົ້າປ່າ ຕໍ່ສູ້ ຫລື ໜີໄປຫາບ່ອນປອດໄພ໌ຍ ເພື່ອເອົາຊີ ວິດລອດ.

ໃນປີ 2006 ນີ້ ຈຶ່ງຍັງມີປະຊາຊົນລາວເຜົ່າລາວສູງ "ມົ້ງ" ໄດ້ໂຕນໜີ ອອກຈາກປະເທສລາວໄປອາໄສຢູ່ ບ້ານຫວ້ຍນໍ້າຂາວ, ເປັນຈໍານວນຫລາຍກວ່າ ເຈັດ ພັນຄົນ. ຄວາມຫວັງ ກໍແມ່ນ ໜີໃຫ້ພົ້ນລັທທິອຸບາດ ພະເດັດການ ກາອໍານາຕໂດຽໃຊ້ແກວໝູ່ນຫລັງ ປາບປາມ ທໍາລາຍປະຊາຊົນລາວ ໃຫ້ຕາຍຫລື ໃຫ້ໜີ ອອກ. ອົພະຍົບຈໍານວນນີ້ ມີທັງໝົດ ຫລາຍກວ່າ 7,000 ຄົນໄດ້ຖືກໄທ໌ຍ ບີບບັງຄັບ ສົ່ງກັບໄປໃຫ້ ສປ ປລ ໃນວັນທີ່ 28 ເດືອນທັນວາ (December) ປີ 2009 ໄດ້ໄປຕັ້ງຖິ່ນຖານຢູ່ບ້ານໂພນຄໍາ ແຂວງ ບໍຣິ ຄໍາໄຊ ບໍ່ມີຜູ້ໃດ ຮູ້ສະພາບ ການເປັນຢູ່ຂອງ ເຂົາ ອີກເລີຍ.  ເໜືອໄປກວ່ານີ້ ສັບສິນ; ຢ້າວເຮືອນ; ທີ່ດິນ ຂອງຜູ້ທີ່ໄດ້ໜີໄປຫລີ້ໄພ໌ຍ ແລ້ວແມ່ນ ລາວ ຄ.ມ.ນ. ໄດ້ຍຶດໝົດ ແລະ ກໍເອົາໄປເປັນຂອງຫລວງ ບໍ່ໄດ້ສົ່ງ ຄືນໃຫ້ຜູ້ເປັນເຈົ້າຂອງ ແລະ ບໍມີສິດໄປທວງເອົາອີກເລີຍ.



*ຮູບທີ່ 149. ພີ່ນ້ອງເຜົ່າມົ້ງກໍາລັງອົພະຍົບຕິດ ຕາມນາຍພົນວ່າງປາວ ໄປປະເທສໄທ໌ຍໃນປີ 1975. ທຸກຄົນຕ້ອງຍ່າງດ້ວຍຕີນ ເປົ່າ ເພື່ອບໍ່ ໃຫ້ມີສຽງດັງ ແລະຢຽບໄດ້ອັນໃດກໍຮູ້ສຶກໄດ້ດີ ກ່ອາຖືເກີບຍ່າງ.*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*<u>ຮູບທີ່ 150</u>. ເດັກນາງ ເຊົາລີ 16 ປີ; ນາງເຈັ້ຍເຮີ 15 ປີ ແລະ ນາງເມົາລີ 14 ປີ ຖືກຂ້າຖິ້ມ ປີ 2004 ຊຽນໄວ້ຂາຂອງນາງ ແລ້ວຍັງບໍ່ພໍ ຮອ້ງໂຮດ່າວ່າ "ພວກ ຊີໄອເອ ຂ້າຖິ້ມໃຫ້ໝົດ!". ຮູບໄດ ຂອງ ຟັກໄຟດິງໂກມິຊັງ (Fact Finding Commission) ທີ່ໄດ້ເຂົ້າໄປໃນປະເທສລາວ ແລ້ວສົ່ງອອກທາງ ອິນເຕີແນຕ. ຂໍຂອບໃຈ.*



*<u>ຮູບທີ່ 151</u>. ຊາວອິພະຍົບມົ້ງພາກສອງ ກຳລັງໃຊ້ເຮືອນ້ອຍໆ ຂ້າມນ້ຳຂອງແບບກັນດານທີ່ສຸດ. ມີຫລາຍຄົນຈົມລົງນ້ຳຍ້ອນເຮືອຂ້ວມ ມາຈາກບໍ່ຮູ້ຂີ່ເຮືອ ຍືນຢູ່ເທິງເຮືອ, ຖືກຍິງ, ນ້ຳພັດແຮງ, ຂີ່ເຮືອເກີນນ້ຳນັກ ເບິ່ງຕາມຮູບນີ້ ຫລາຍຄົນຍັງລໍເຮືອຢູ່ເບື້ອງຫລັງ.*



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 11.

# ການຈັດຕັ້ງຣັຖບາລຊຸດຕ່າງໆ

ໃນປີ 1893-1954, ລາວເປັນຫົວເມືອງຂຶ້ນຂອງຝລັ່ງເສສ. ໃນວັນທີ່ 7 ເດືອນພຶສະພາ (May) 1954 ຝຣັ່ງເສສໄດ້ເສັຍສົງຄາມດຽນບຽນຟູ, ໄດ້ຖອນກໍາລັງທະຫາຣອອກຈາກອິນດູຈີນ ຝຣັ່ງເສສໄດ້ມອບເອກະຣາຊໃຫ້ລາວ, ຂເມນ, ວຽດນາມ ແຕ່ການແຊກແຊງ ຂອງ ຄ.ມ.ນ. ວຽດນາມ ບໍ່ສິ້ນສຸດຍັງຄົງດໍາເນີນຕໍ່ໄປຢູ່ໃນລາວ, ຂເມນ ແລະ ວຽດນາມໃຕ້. ສະໄມການປົກຄອງຂອງຝຣັ່ງເສສ ຢູ່ໃນອິນດູຈີນ, ຝຣັ່ງບໍ່ໄດ້ສົນໃຈໃສ່ດ້ານພັທະນາເມືອງລາວ ເພາະຖືວ່າລາວເປັນ ພາຄສ່ວນ ທີ່ບໍ່ມີຄວາມສໍາຄັນ ເປັນແນວໜ້າຢູ່ຫ່າງໄກ, ຖນົນຫົນທາງ ກໍປັບປຸງຍາກ ເພາະເປັນພູສູງ, ການຄົມມະນາຄົມອອກສູທະເລ ກໍບໍ່ມີ, ເປັນປະເທສທີ່ມີພາຄສ່ວນເປັນພູເຂົາ ສ່ວນຫລາຍ. ຝຣັ່ງໄດ້ເລືອກເອົານະຄອນວຽງຈັນທນ໌ ເປັນພຽງສູນກາງການຄ້ານອັຍໆລະຫວ່າງປະເທສສະຍາມ ແລະໄດ້ເລືອກເອົາເມືອງຫລວງພະບາງ ຊຶ່ງເປັນບ່ອນປະທັບຂອງເຈົ້າຊີວິຕລາວ ເປັນທີ່ປຶກສາ ບາງຢ່າງໃຫ້ຝຣັ່ງເສສ ຕາມຄວາມຕ້ອງການ.

ຝຣັ່ງເສສໄດ້ເລືອກເອົາເຊໂນ ຢູ່ສວັນນະເຂຕ ເປັນທີ່ຕັ້ງສໍາຄັນຢູ່ໄນພາຄໃຕ້ ສໍາຫລັບເດີນຍົນຕ໌. ຢູ່ພາກເໜືອຂອງລາວ, ຝຣັ່ງເສສໄດ້ເອົາທົ່ງໄຫຫີນ ແລະ ຜອງສາລີ ເປັນຈຸດສໍາຄັນ ດ້ານການບິນ. ຝຣັ່ງເສສ ໄດ້ແບ່ງເມືອງລາວ ອອກເປັນ ສອງພາຄ ຄື: ພາຄເໜືອແລະພາຄໃຕ້. ຝຣັ່ງເສສ ເອົາປະເທສວຽດນາມ ເປັນຈຸດສໍາຄັນເພື່ອຕັ້ງສູນກາງ ການຄ້າ ໃນອິນດູຈີນ ຄື: ຕົງແກງ, ອານາມ ແລະ ໂກແຊງຊິນ (Tonkin, Annam and Cochinchine) ສູນກາງຄວບຄູມຂອງຝຣັ່ງເສສ ແມ່ນຕັ້ງຢູ່ຮາໂນຽ (Hanoi) ວຽດນາມເໜືອ ທີ່ຕັ້ງສໍາລອງແມ່ນ ຕັ້ງຢູ່ ກາບແຊງຊັກ (Cap Saint-Jacques) ຝຣັ່ງເສສ ຢາກສ້າງສູນກາງການຄ້າແຫ່ງນີ້ ໃຫ້ງາມຄື ປາຣີ ປະເທສຝຣັ່ງເສສ ແຕ່ບໍ່ມີໂອກາດ.

ເມື່ອປະເທສລາວໄດ້ຮັບ ເອກກະຣາຊ ຈາກຝຣັ່ງເສສ ໃນປີ 1954 ຣັຖບາລ ແຫ່ງພຣະຣາຊອານາຈັກລາວ ຈຶ່ງໄດ້ຈັດຕັ້ງໃຫ້ມີແຂວງ ຕ່າງໆຂຶ້ນ ເປັນສິບສອງ ແຂວງ. ໃນປີ 1962, ໄດ້ຈັດຕັ້ງຂຶ້ນຕື່ມອີກ ຣວມເປັນ 18 ແຂວງ. ປະຈຸບັນ ຢູ່ໃນການປົກຄອງ ຂອງຣະບອບ ສປປລ ມີ 17 ແຂວງ ຄື: ຜອງສາລີ, ຫລວງນໍ້າທາ, ບໍ່ແກ້ວ, ອຸດົມໄຊຍ, ຫລວງພຣະບາງ, ຫົວພັນ, ຊຽງຂວາງ, ໄຊຍະບູຣີ, ວຽງຈັນທນ໌, ກໍາແພງນະຄອນວຽງຈັນທນ໌, ບໍຣິຄໍາໄຊ, ຄໍາມ່ວນ, ສວັນນະເຂດ, ສາຣະວັນ, ເຊກອງ, ຈໍາປາສັກ ແລະ ແຂວງອັດຕະປື (ສປປລ ໄດ້ເອົາແຂວງເຊໂດນ ອອກຈຶ່ງເຫລືອແຕ່ 17 ແຂວງ).



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1945, ຜູ້ນຳຂອງລາວແມ່ນ ເຈົ້າເພັດຊຣາຊ ເພື່ອຕໍ່ສູ້ເອົາເອກະຣາຊ ຈາກຝຣັ່ງເສສ. ເມື່ອມີການຕໍ່ສູ້, ຝຣັ່ງເສສ ຈຶ່ງໄດ້ຫັນປ່ຽນທ່າທີ ມາເປັນຜູ້ຄູ້ມຄອງລາວ, ເພື່ອປ້ອງກັນການລຸກລາມ ຈາກປະເທສໃກ້ຄຽງ. ໃນເດືອນສິງຫາ ວັນທີ່ August 30, 1945, ພຣະເຈົ້າສີສວ່າງວົງສ໌ ໄດ້ປະກາສເອກະຣາຊ ຂອງລາວ ພາຍໃຕ້ການດູແລຂອງຝຣັ່ງເສສ. ໃນເດືອນກັນຍາ September 1945, ລາວອິສສຣະ ບໍ່ພໍໃຈກັບການ ປະກາສຂອງ ພຣະເຈົ້າສີ ສວ່າງວົງສ໌ ແລະ ຝຣັ່ງເສສ.

ໃນເດືອນຕຸລາ ວັນທີ່ October 12, 1945, ເຈົ້າເພັດຊຣາຊໄດ້ປະກາສ ຈັດຕັ້ງຣັຖບາລໂຮມລາວ ຢູ່ ນະຄອນ ວຽງຈັນທນ໌ ປະກອບດ້ວຍ:

**ຣັຖບາລຊຸດທຳອິດຂອງເຈົ້າ ເພັດຊຣາຊຢູ່ລາວ.**

| | |
|---|---|
| - ຊຽງມ້າວ ວິໄລ | ນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ກະຊວງຕ່າງປະເທສ |
| - ເຈົ້າ ສຸວັນນະພູມາ | ຣ.ມ.ຕ. ກະຊວງໂຍທາທິການ |
| - ເຈົ້າ ສົມສະນິດ | ຣ.ມ.ຕ. ກະຊວງມະຫາດໄທ ແລະ ຍຸຕິທັມ |
| - ກະຕ່າຍ ໂດນສະໂສຣິດ | ຣ.ມ.ຕ. ກະຊວງການຄັງ |
| - ຫຍຸຍ ອະໄພ | ຣ.ມ.ຕ. ກະຊວງສຶກສາທິການ |
| - ເຈົ້າ ສຸພານຸວົງ | ຣ.ມ.ຕ. ປ້ອງກັນປະເທສ ແລະ ໄທຣະໂຄມະນະຄົມ |
| - ອູ່ນ ຊະນະນິກອນ | ຣ.ມ.ຕ. ກະຊວງ ເສຖາກິດ |
| - ອູ່ນເຮືອນ ນໍຣະສິນ | ຣ.ມ.ຕ. ກະຊວງ ຍຸຕິທັມ |
| - ສິງ ຣັຕນະສະໄໝ | ຣ.ມ.ຕ. ຊ່ວຍ ກະຊວງປ້ອງກັນປະເທສ |
| - ເກື່ອງ ປະທຸມຊາດ | ຣ.ມ.ຕ. ຊ່ວຍ ກະຊວງເສຖາກິດ |
| - ທັມ ໄຊສິດເສນາ | ຣ.ມ.ຕ. ຊ່ວຍ ກະຊວງຕ່າງປະເທສ |

ໃນວັນທີ່ 20 ເດືອນຕຸລາ (October) 1945, ຣັຖບາລຂອງ ເຈົ້າເພັດຊຣາຊ ໄດ້ປະກາສປົດ ພຣະເຈົ້າ ສີສວ່າງວົງສ໌ ອອກຈາກບັນລັງ ແລະ ໄດ້ຈັບໄປຄູມຂັງໄວ້. ໃນວັນທີ່ 30 ເດືອນຕຸລາ (October) 1945, ເຈົ້າສຸພານຸວົງສ໌ ປະກາສຕັ້ງພັຄປະຕິວັຕລາວ, ເພື່ອເຂົ້າຮ່ວມກັບພັຄປະຕິວັຕວຽດມິນ ແລະ ເພື່ອຕໍ່ຕ້ານ ຣັຖບາລ ຂອງເຈົ້າຊີວິດສີສວ່າງວົງສ໌. ໃນວັນທີ່ 15 ເດືອນເມສາ (April) 1946, (ພ.ສ. 2488) ຝຣັ່ງ ໄດ້ ກັບມາຕີເອົາເມືອງລາວ ຄະນະລາວອິສະຣະ (ລປລ) ໄດ້ອົພະຍົບ ລົບໜີໄປອາໄສລີ້ໄພ້ຍຢູ່ໃນປະເທສ ໄທ໌ຍ ແລ້ວຈັດຕັ້ງ ຣັຖບາລ ພັດຖິ່ນຂື້ນ ດັ່ງລູ່ມນີ້:


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ຣັຖບາລພັດຖິ່ນຂອງເຈົ້າເພັຊຣາຊຢູ່ໃນປະເທສໄທ໌ຍ.**

- ຊຽງມ້າວ ວິໄລ ນາຍົກຣັຖະມົນຕຣີ
- ກະຕ່າຍ ໂດນສະໂສຣິດ ຣ.ມ.ຕ. ກະຊວງໂຄສະນາການ
- ເຈົ້າຄຳຕັນ ຣ.ມ.ຕ. ກະຊວງການຄັງ
- ເຈົ້າ ສຸວັນນະພູມາ ຣ.ມ.ຕ. ກະຊວງໂຍທາທິການ
- ເຈົ້າ ສຸພານຸວົງ ຣ.ມ.ຕ. ກະຊວງປ້ອງກັນປະເທສ ແລະ ທະຫາຣ

ນອກຈາກນີ້ ກໍມີຫລາຍ ທ່ານຮ່ວມງານ ພຽງແຕ່ຮູ້ ເຈົ້າ ສົມສະນິດ ແລະ ເຫລື່ອມ ອິນສີຊຽງໃໝ.

ໃນວັນທີ່ 27 ເດືອນມົກະຣາ (January) 1946 ທ່ານຕູ້ບີ, ທ່ານຕູ້ເຢີ ແລະເຈົ້າແຂວງສາຍຄຳ ສຸທະກະກູມາຣ ຍຶດໄດ້ຊຽງຂວາງ ຈາກຄນະ ລປລ ແລະ ວຽດມິນ ທີ່ຫາກໍມາຍຶດໄດ້ຊຽງຂວາງ ໃນວັນທີ່ 28 ເດືອນທັນວາ (December) 1945 ບໍ່ທັນຮອດສອງເດືອນ. ໃນວັນທີ່ 25 ເດືອນເມສາ (April) 1946, ຝຣັ່ງ ແລະ ລາວຝ່າຍຂວາ ເຂົ້າຍຶດເອົານະຄອນວຽງຈັນທນ໌ໄດ້. ລາວອິສສະຣະໄດ້ໂຕນຂ້າມແມ່ນ້ຳຂອງ ໄປຝັ່ງປະເທສໄທຍ໌; ໃນເວລາໂຕນໜີ ເຈົ້າສູພານຸວົງສ໌ ໄດ້ຖືກບາດເຈັບ ມາຈາກຍົນຕ໌ຝຣັ່ງຍິງ ຢູ່ທ່າແຂກຕອນກຳລັງ ຂ້າມແມ່ນ້ຳຂອງ ໄປປະເທສໄທຍ໌. ເມື່ອອາການໄຄແດ່ ໄດ້ໂຕນເຂົ້າປ່າ, ກັບໄປຫານາຍເໜືອຫົວຄື ວຽດ ຄອມມຸຍນິສ (ແມ່ນ ວຽດເປັນຜູ້ສົ່ງເຈົ້າສຸພານຸວົງສ໌ ມາຄູ້ມຄອງແຂວງທ່າແຂກ ໃນປີ 1945).

ໃນວັນທີ່27 ເດືອນສິງຫາ (August)1946, ຝຣັ່ງເສສ ແລະ ລາວໄດ້ເຊັນສັນຍາ ຕົກລົງມອບເອກະຣາຊໃຫ້ລາວ ຊຶ່ງແມ່ນພຣະເຈົ້າສີສວ່າງວົງສ໌ ເປັນຜູ້ປົກຄອງລາວ, ພຣະອົງໄດ້ໂຮມເອົາ ປະຊາ ຊົນລາວທຸກຊົນຊາຕ ຊົນເຜົ່າເຂົ້າເປັນອັນນຶ່ງອັນດຽວ, ໃຫ້ລາວສ້າງຕັ້ງກົດໝາຍຣັຖທັມມະນູນ, ໃຫ້ມີສະພາຜູ້ແທນຣາຊດອນ, ໃຫ້ຢູ່ໃນການຄູ້ມຄອງຄວາມປອດໄພຍ໌ ດ້ານທະຫາຣ ແລະ ດ້ານເສຖກິດ ຂອງຝຣັ່ງເສສ ໂດຍແມ່ນພຣະເຈົ້າສີສຫວ່າງວົງສ໌ ເປັນຜູ້ລົງພະຫັດເຊັນ. ໃນລະຍະດຽວກັນນັ້ນ ຣາຊ ອານາຈັກໄທຍ໌ ໄດ້ຕົກລົງກັບຝຣັ່ງ ເພື່ອສົ່ງແຂວງໄຊຍະບູຣີ, ແຂວງຈຳປາສັກ ຄືນໃຫ້ລາວ.

ໃນວັນທີ່ 12 ເດືອນທັນວາ (December ) 1946 ເປັນມື້ເລືອກຕັ້ງສະພາຮ່າງກົດໝາຍຂອງລາວ. ໃນວັນທີ່ 27 ເດືອນພຶດສພາ (May) 1947 ເປັນມື້ປະກາສກົດໝາຍຣັຖທັມະນູນ ແຫ່ງພຣະຣາຊອານາຈັກລາວ. ໃນເດືອນສິງຫາ (August) 1947, ການເລືອກຕັ້ງຜູ້ແທນຣາສດອນ ທີ່ວພຣະຣາຊອານາຈັກລາວ ແມ່ນເຈົ້າສູວັນນາພູມາ ຖືກພຣະເຈົ້າສີສວ່າງວົງສ໌ ຊົງພຣະຣາຊທານ ແຕ່ງຕັ້ງ ເປັນນາຍົກຣັຖມົນຕຣີ ຄົນທຳອິດຂອງລາວ ໃນກຳນົດນຶ່ງປີ. (ທ່ານຕູ້ເລັ້ຍ ລີຟຸງ ກໍ່ແມ່ນຄົນເຜົ່າລາວສູງ "ມົ້ງ" ຜູ້ທຳອິດ ໄດ້ຮັບ ເລືອກເປັນສະມາຊິກສະພາ ຜູ້ແທນຣາຊດອນແຂວງຊຽງຂວາງ ແຫ່ງພຣະຣາຊອານາຈັກລາວ).


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**<u>ຣັຖບາລຊຸດທີ່ 1</u> ຂອງພຣະເຈົ້າມະຫາຊີວິດ ສີສວ່າງວົງສ໌ ຢູ່ໃນ ພຣະຣາຊອານາຈັກລາວ**

ຕາມພະຣາຊອົງການ ສບັບທີ່ 148 ລົງວັນທີ່ 10 ກໍຣະກະດາ (July) 1947 ອາຍຸປີການແຕ່ ວັນທີ່ 15 ມີນາ (March) 1947 ເຖິງເດືອນມີນາ ວັນທີ່ 24 (March) 1948.

- ເຈົ້າສູວັນນາພູມາ    ນາຍົກຣັຖມົນຕຣີ ຣ.ມ.ຕ. ກະຊວງມະຫາດໄທ ແລະປ້ອງກັນປະເທສ
- ເຈົ້າກິນດາວົງ    ຣ.ມ.ຕ. ກະຊວງເສຖາກິດ
- ອູທອງ ສຸວັນນະວົງ    ຣ.ມ.ຕ. ກະຊວງການຄັງ
- ຜຸຍ ຊະນະນິກອນ    ຣ.ມ.ຕ. ກະຊວງສຶກສາ, ສາທາຣະນະສຸກ, ປະຊາສົງເຄາະ
- ກຸ ອະໄພ    ຣ.ມ.ຕ. ກະຊວງຍຸຕິທັມ ແລະທັມມະການ

ໄດ້ປັບປຸງຣັຖບາລຊຸດນີ້ ຄັ້ງໜຶ່ງ ຕາມພະຣາຊອົງການ ສບັບທີ່ 3 ລົງວັນທີ່ 4 ມີນາ 1948

- ເຈົ້າ ສູວັນນະຣາຊ    ນາຍົກຣັຖມົນຕຣີ
- ເຈົ້າກິນດາວົງ    ຣ.ມ.ຕ. ກະຊວງປ້ອງກັນປະເທສ
- ອູທອງ ສູວັນນະວົງ    ຣ.ມ.ຕ. ກະຊວງມະຫາດໄທ
- ເຫຼື່ອມ ອິນສີຊຽງໃໝ່    ຣ.ມ.ຕ. ກະຊວງການຄັງ
- ກຸ ວໍຣະວົງ    ຣ.ມ.ຕ. ກະຊວງໂຍທາ, ຍຸຕິທັມ ແລະ ທັມມະການ
- ບົງ ສຸວັນນະວົງ    ຣ.ມ.ຕ. ກະຊວງເສຖາກິດ
- ກຸ ອາໄພ    ຣ.ມ.ຕ. ກະຊວງສຶກສາທິການ ແລະ ສາທາຣະນະສຸກ

ຣັຖບາລຊຸດນີ້ ໄດ້ພົ້ນຕໍາແໜ່ງ ເນື່ອງຈາກມີການເລືອກຕັ້ງ ສະມາຊິກສະພາ ຜູ້ແທນຣາຊດອນຊຸດທໍາອິດ ຂອງຊາຕລາວ ເມື່ອວັນທີ່ ທັນວາ December 7, 1947 ຈຶ່ງຕ້ອງລາອອກ ເພື່ອຈັດຕັ້ງ ຣັຖບາລຊຸດທີ່ ສອງ.

**<u>ຣັຖບາລຊຸດທີ່ 2</u>**

ພະຣາຊອົງການ ສະບັບທີ່ 38 ລົງວັນທີ່ 21 ມີນາ 1948 ອາຍຸປີການ ແຕ່ວັນທີ່ 25 ມີນາ 1948 ເຖິງ ວັນທີ່ 24 ກຸມພາ (February) 1950

- ເຈົ້າ ບູນອູ້ມ ນະຈໍາປາສັກ    ນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ປ້ອງກັນປະເທສ
- ເພົ້າ ປັນຍາ    ຣ.ມ.ຕ. ກະຊວງການຄັງ
- ເຫຼືອມ ອິນສີຊຽງໃໝ່    ຣ.ມ.ຕ. ກະຊວງມະຫາດໄທ ແລະ ໂຍທາທິການ
- ຫຍຸຍ ອະໄພ    ຣ.ມ.ຕ. ກະຊວງສຶກສາ, ສາທາຣະນະສຸກ, ທັມມະການ ແລະຖແລງຂ່າວ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1949, ໄກສອນ ພົມວິຫານ ປະກາສຕັ້ງຂະບວນລາວອິສສຣະ ຮ່ວມກັບໂຮຈິມິນ ຕັ້ງພັຄຄອມ ມຸຍນິສອິນດູຈີນຂຶ້ນຢູ່ວຽດນາມເໜືອ. ໃນເດືອນກໍຣະກາດາ ວັນທີ່ 19 (July) ປີ 1949 ຝຣັ່ງເສສຮັບຮູ້ເອກຣາຊຂອງລາວ ຢູ່ໃນເຄືອສຫະພັນຝຣັ່ງເສສ. ໃນເດືອນຕຸລາ ວັນທີ່ 24 (October) 1949 ລາວອິສສຣະຢູ່ໃນຕ່າງປະເທສ ປະກາສຍູບພັຄ ລປລ ສ່ວນນຶ່ງໄດ້ ກັບຄືນປະເທສ ເພື່ອຮ່ວມກັບຣັຖບາລ ຣາຊອານາຈັກລາວ ສ່ວນນຶ່ງໄດ້ໜີເຂົ້າປ່າໄປຮ່ວມກັບພັຄລາວອິສສຣະ ຂອງໄກສອນພົມວິຫານ ທີ່ໄດ້ຮັບການສນັບສນຸນຈາກ ວຽດມິນ. ໃນເດືອນກຸມພາ ວັນທີ່ February 27, 1950, ທ່ານຜຸຍ ຊະນະນິກອນ ຂຶ້ນເປັນນາຍົກຣັຖມົນຕຣີໄດ້ຈັດຕັ້ງຄນະຣັຖບາລຂຶ້ນ.

**<u>ຣັຖບາລ ຊຸດທີ່ 3</u>**

ຕາມພະຣາຊອົງກາຣ ສບັບທີ່ 34 ວັນທີ່ 28 ເດືອນກູມພາ (February) 1950 ອາຍຸປົກາຣແຕ່ ກູມພາ (February) 24, 1950 ເຖິງຕຸລາ (October) 15, 1951.

- ທ່ານ ພຸຍ ຊະນະນິກອນ — ນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ປ້ອງກັນປະເທສ
- ອຸທອງ ສູວັນນະວົງ — ຣ.ມ.ຕ. ຕ່າງປະເທສ ແລະ ຣ.ມ.ຕ. ສຶກສາທິກາຣ
- ກຸ ວໍຣະວົງ — ຣ.ມ.ຕ. ມະຫາດໄທ ແລະ ຣ.ມ.ຕ. ທັມມະກາຣ
- ເພົ້າ ປັນຍາ — ຣ.ມ.ຕ. ກະຊວງຄັງ
- ເຫຼືອມ ອິນສີຊຽງໃໝ່ — ຣ.ມ.ຕ. ກະຊວງເສຖາກິດ
- ເຈົ້າ ສຸວັນນະພູມາ — ຣ.ມ.ຕ. ໂຍທາທິກາຣ, ຂົນສົ່ງ, ແຜ່ນຜັງ ແລະໄທຣະໂຄມມະນາຄົມ

ພົ້ນຈາກຕໍາແໜ່ງເນື່ອງຈາກມີການເລືອກຕັ້ງ ສສ ຊຸດທີ່ສອງຂຶ້ນໃໝ່ ໃນວັນທີ່ 2 ເດືອນພຶສຈິກາ (November) 1951 ສະມາຊິກສະພາ (ສ.ສ.) ສ່ວນຫລາຍ ສນັບສນຸນເຈົ້າສູວັນນາພູມາ. ໃນເດືອນຕຸລາ (October) ວັນທີ່ 13-15, 1950, ຂະບວນລາວ ຄ.ມ.ນ. ນໍາໂດຍສະເດັດເຈົ້າສຸພານຸວົງສ໌ ແລະໄກສອນ ພົມວິຫານ ເປີດປະຊູມເປັນຄັ້ງທໍາອິດ. ສຸພານຸວົງສ໌ ເປັນປະທານພັຄ ແລະໄກສອນ ພົມວິຫານເປັນຣັຖມົນຕຣີປ້ອງກັນປະເທສຂອງຂະບວນລາວ ຄ.ມ.ນ. ຊຶ່ງຢູ່ພາຍໃຕ້ພັຄ ອິນດູຈີນ ໂຮຈິມິນ ເປັນປະທານ. ໃນເດືອນກຸມພາ (February) 1951, ໂຮຈິມິນ ໄດ້ສັ່ງໃຫ້ພັຄອິນດູຈີນ ສ້າງຄວາມປັ່ນປ່ວນທົ່ວທຸກບ່ອນໃນສາມປະເທສ ອິນດູຈີນ (ລາວ, ຂະເມນ ແລະ ວຽດນາມ). ໃນເດືອນພຶສະຈິກາ (November) ວັນທີ່ 21, 1951, ເຈົ້າສຸວັນນາພູມາ ປະກອບຣັຖະບາລ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**<u>ຣັຖບາລຊຸດທີ່ 4.</u>**

ຕາມພະຣາຊອົງການຣສະບັບທີ່ 286 ເດືອນທັນວາ (December) ວັນທີ່ 23, 1951 ອາຍຸປີການ ແຕ່ ເດືອນພືສຈິກາ (November) ວັນທີ່ 21, 1951 ເຖິງເດືອນຕຸລາ (October) ວັນທີ່ 20, 1954.

| | |
|---|---|
| - ເຈົ້າ ສູວັນນາພູມາ | ນາຍົກຣັຖມົນຕຣີ, ຣ.ມ.ຕ. ໂຍທາ, ຂົນສົ່ງ,ແຜ່ນຜັງ ແລະ ໄປສະນີ |
| - ຜຸຍ ຊະນະນີກອນ | ຣ.ມ.ຕ. ປ້ອງກັນປະເທສ, ມະຫາດໄທ, ກິລາ ແລະ ຍູວະຊົນ |
| - ຊຽງມ້າວ ວິໄລ | ຣ.ມ.ຕ. ຍູຕິທັມ, ທັມມະການ, ສາທາຣະນະສຸກ, ແລະ ປະຊາສົງເຄາະ |
| - ຫຍຸຍ ອະໄພ | ຣ.ມ.ຕ. ຕ່າງປະເທສ, ສຶກສາທິການ ແລະ ຖແລງຂ່າວ. |
| - ກະຕ່າຍ ໂດນສະໂສຣິດ | ຣ.ມ.ຕ. ຄັງ ແລະ ເສຖາກິດ |

ຣັຖບາລຊຸດນີ້ ຖືກປັບປູງສອງຄັ້ງ ຕາມພະຣາຊອົງການ ສບັບ 13 ເດືອນ ພຶສພາ ວັນທີ່ 8 ( May) 1953 ແລະ ສະບັບ ລົງ ເດືອນ ມີນາ ວັນທີ່ 18 (March)1954.

| | |
|---|---|
| - ເພັງ ພົງສວັນ | ຣ.ມ.ຕ. ກະຊວງມະຫາດໄທ ກິລາ ແລະ ຍຸວະຊົນ |
| - ໂງ່ນ ຊະນະນີກອນ | ຣ.ມ.ຕ. ເສຖາກິດ. |

ພື້ນຕຳແໜ່ງ ລາອອກເພື່ອໃຫ້ມີການຈັດຕັ້ງຣັຖບາລຊຸດໃໝ່ ໃຫ້ສົມບູນຕາມຂໍ້ຕົງລົງ ລະຫວ່າງ 9 ປະເທສ ທີ່ເຊັນສັນຍາ ເດືອນກໍລະກະດາ (July) ວັນທີ່ 20, 1954. ຫລັງຈາກສັນຍາເຊີແນວແລ້ວ ພັຄລາວຄອມມຸຍນິສຕ໌ ໄດ້ໂຮຮອ້ງຂຶ້ນວ່າ ພັຄຄອມມຸຍນິສຕ໌ອິນດູຈີນ ໄດ້ໄຊ໌ຍຊະນະຢ່າງງົດງາມ, ໄດ້ດຳເນີນການປາບປາມກອງທັພຂອງຝ່າຍຣັຖບາລວຽງຈັນທນ໌ ດ້ວຍກຳລັງທະຫາຣ ແລະ ການໂຄສະນາ ເອີ້ນຝ່າຍວຽງຈັນທນ໌ ວ່າ: "ລູກແຫລ້ງຕີນມືຂອງປະຕິການ ເປັນລ່າຫົວເມືອງຂຶ້ນຂອງຈັກະພັດຝຣັ່ງເສສ." ໃນເດືອນກັນຍາ (September) ວັນທີ່ 18, 1954 ທ່ານກູ້ວໍຣະວົງ ຣັຖະມົນຕຣີກະຊວງປ້ອງກັນປະເທສຂອງຣັຖບາລແຫ່ງ ພຣະຣາຊອານາຈັກລາວ ແລະເປັນຜູ້ຕາງໜ້າ ໄດ້ໄປເຊັນສັນຍາສະງົບເສິກຢູ່ທີ່ເຊີແນວ ຕາງໜ້າລາວຝ່າຍວຽງຈັນທນ໌ ໃນວັນທີ່ 7/20/1954, ໄດ້ຖືກລອບສັງຫາຣຕາຍ ຢູ່ບ້ານພັກພນະທ່ານ ຜູຍຊນະນີກອນ ຕອນກິນລ້ຽງ.

ໃນເດືອນພຶດຈິກາ (November) ວັນທີ່ 27, 1954, ພນະທ່ານກະຕ່າຍ ໂດນສະໂສຣິດ ໄດ້ຈັດຕັ້ງຣັຖບາລຂຶ້ນ ແລະ ໄດ້ເປັນນາຍົກຣັຖະມົນຕຣີ.

**<u>ຣັຖບາລຊຸດທີ່ 5</u>**


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພະຣາຊອົງການສບັບທີ່ 397 ໃນເດືອນ ພຶສຈິກາ (November) ວັນທີ່ 29, 1954 ອາຍຸປົການແຕ່ ເດືອນກຸມພາ (February) ວັນທີ່ 13, 1956.

- ກະຕ່າຍ ໂດນສະໂສຣິດ ນາຍົກຣັຖມົນຕຣີ, ກະຊວງມະຫາດໄທ, ແລະ ຍຸຕິທັມ
- ເຈົ້າ ສຸວັນນະພູມາ ຮອງນາຍົກ, ແລະ ກະຊວງປ້ອງກັນປະເທສ
- ຜຸຍ ຊະນະນິກອນ ຮອງນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ກະຊວງການຕ່າງປະເທສ
- ຫຍຸຍ ອາໄພ ຣ.ມ.ຕ. ສຶກສາທິການ
- ຄຳມ້າວ ວິໄລ ຣ.ມ.ຕ. ທັມມະກາຣ
- ເຫຼືອມ ອິນສີຊຽງໃໝ່ ຣ.ມ.ຕ. ກະຊວງຄັງ
- ພວງເພັດ ພານາເຣດ ຣ.ມ.ຕ. ຊ່ວຍວ່າກາຣຄັງ
- ເພັງ ພົງສວັນ ຣ.ມ.ຕ. ໂຍທາທິກາຣ, ແຜ່ນຜັງ, ຂົນສົ່ງ ແລະ ຄົມມະນາຄົມ
- ໂງ່ນ ຊະນະນິກອນ ຣ.ມ.ຕ. ການຄ້າ, ອຸດສາຫະກັມ, ກິລາ ແລະ ຍຸວະຊົນ
- ດຣ. ອູດົມ ສຸວັນນະວົງ ຣ.ມ.ຕ. ສາທະຣະນະສຸກ ແລະໂຄສະນາກາຣ
- ດຣ. ທອງດີ ສູນທອນວິຈິດ ຣ.ມ.ຕ. ເພາະປູກ ແລະ ລ້ຽງສັດ
- ອູ່ນເຮືອນ ນໍຣະສິງ ຣ.ມ.ຕ. ຊ່ວຍວ່າກາຣ ມະຫາດໄທ

ໃນວັນທີ່ 1 ເດືອນທັນວາ (December) 1954, ພນະທ່ານ ກະຕ່າຍ ໂດນສະໂສຣິດ, ນາຍົກຣັຖະມົນຕຣີ ໄດ້ຮຽກຮອ້ງໃຫ້ລາວສອງຝ່າຍ ພົບປະເຈຣະຈາກັນ ເພື່ອປຶກສາການທອ້ນໂຮມລາວ, ຝ່າຍຣັຖະບາລຂອງພນະທ່ານກະຕ່າຍໂດນສະໂສຣິດ ໄດ້ແຕ່ງຕັ້ງ ທ່ານ ດຣ. ທອງດີ ເປັນຫົວໜ້າຄນະ, ຝ່າຍລາວຄອມມຸຍນິສຕ໌ ແມ່ນ ທ່ານພູມີ ວົງວິຈິດ. ທັງສອງຝ່າຍໄດ້ພົບປະກັນຄັ້ງທີ່ໜຶ່ງຢູ່ທົ່ງໄຫຫີນ, ການພົບປະກັນໃນຄັ້ງນີ້ບໍ່ເກີດຜົລຫັຍງຈັກຢ່າງ ເພາະວ່າຝ່າຍລາວຄອມມຸຍນິສຕ໌ ອ້າງວ່າຝ່າຍຕົນເປັນຝ່າຍໄດ້ໄຊຍ໌ຊນະ. ຄັ້ງທີ່ສອງພົບປະກັນ ຢູ່ທົ່ງໄຫຫີນເໝືອນເດີມ ຜູ້ຕາງໜ້າຣັຖບາລວຽງຈັນທນ໌ ແມ່ນທ່ານເພັຍອູ່ນເຮືອນ ນໍຣະສິງ , ຝ່າຍລາວຄອມມຸຍນິສຕ໌ ແມ່ນທ່ານພູມີ ວົງວິຈິດ ການປະຊູມບໍ່ໄດ້ຜົລເຊັ່ນເຄີຍ. ຄັ້ງທີ່ 3 ຢູ່ນະຄອນວຽງຈັນທນ໌, ຜູ້ຕາງໜ້າຝ່າຍຣັຖບາລວຽງຈັນທນ໌ ແມ່ນ ທ່ານຫຍຸຍອະໄພຍ໌, ຜູ້ຕາງໜ້າຝ່າຍລາວຄອມມຸຍນິສຕ໌ ແມ່ນທ່ານພູມີ ວົງວິຈິດ ຄືເກົ່າ, ການປະຊູມກໍບໍ່ເກີດຜົລຈັກຢ່າງອີກ. ຄັ້ງທີ່ 4 ຢູ່ ນະຄອນວຽງຈັນທນ໌ ຜູ້ຕາງໜ້າຝ່າຍຣັຖບາລວຽງຈັນທນ໌ ແມ່ນທ່ານຕານ ຈຸນລະມູນຕຣີ, ຜູ້ຕາງໜ້າຝ່າຍ ລາວ ຄອມມຸຍນິສຕ໌ ແມ່ນທ່ານພູມີ ວົງວິຈິດ ຄືເກົ່າ ການປະຊູມ ກໍບໍ່ມີຫັຽງຄືບໜ້າ.

ເມື່ອເປັນເຊັ່ນນັ້ນແລ້ວ ເຈົ້າຟ້າຊາຍສີສຫວ່າງວັທະນາ ຈຶ່ງສະເນີໃຫ້ ຂັ້ນສູ່ງສຸດຂອງທັງສອງຝ່າຍ ໄປພົບປະກັນຢູ່ປະເທສພະມ້າ ເມືອງຢາງກຸ້ງ ໃນເດືອນມັງກອນ (January) ວັນທີ່ 6, 1955. ຜູ້ນຳຝ່າຍວຽງຈັນທນ໌ ແມ່ນທ່ານກະຕ່າຍໂດນສະໂສຣິດ ນາຍົກຣັຖະມົນຕຣີແຫ່ງພຣະຣາຊອານາຈັກລາວ ແລະ ຜູ້ນຳຝ່າຍລາວ ຄອມມຸຍນິສຕ໌ ແມ່ນ ເຈົ້າສຸພານຸວົງສ໌. ການປະຊູມດັ່ງກ່າວກໍບໍ່ໄດ້ເກີດຜົລ ເພາະວ່າລາວ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຄ.ມ.ນ. ຍັງຢືນຢູ່ໃນທ່າເດີມບໍ່ມີການປ່ຽນແປງ ມີແຕ່ອ້າງວ່າຝ່າຍຕົນເປັນຜູ້ໄດ້ຮັບໄຊຊະນະຢູ່ເລື້ອຍ. ໃນວັນທີ່ 21 ເດືອນມັງກອນ (January) 1955, ຣັຖະບາລພນະທ່ານກະຕ່າຍ ໂດນສະໂສຣິດໄດ້ອອກດຳຣັດ ສັ່ງໃຫ້ກຳລັງກອງທັບແຫ່ງຊາຕລາວ ສົ່ງກຳລັງບຸກໂຈມຕີລາວຄອມມຸຍນິສຕ໌ ຢູ່ແຂວງຫົວພັນ, ແຂວງຜົງສາລີ ແລະ ພື້ນທີ່ໆ ມີກຳລັງ ລາວ ຄ.ມ.ນ. ຕັ້ງຢູ່ພ້ອມໆກັນ, ຈຶ່ງເຮັດໃຫ້ລາວ ຄ.ມ.ນ. ມີການເຄື່ອນໄຫວ ຮູນແຮງຂຶ້ນ. ໃນວັນທີ່ 22 ເດືອນມີນາ (March) 1955, ລາວອິສສຣະໄດ້ປະກາສປ່ຽນຊື່ຈາກແນວລາວຮັກຊາຕ ໄປເປັນຄນະປະເທສລາວ. ໃນວັນທີ່ 19 ເດືອນທັນວາ (December) 1955, ພຣະຣາຊອານາຈັກລາວໄດ້ຮັບເຂົ້າເປັນສະມາຊິກ ຂອງສະຫະປະຊາຊາຕ (UN). ໃນວັນທີ່ 25 ເດືອນທັນວາ (December) 1955, ມີການເລືອກຕັ້ງ ຜູ້ແທນຣາຊສດອນທີ່ຢູ່ພາຍໃນເຂຕປົກຄອງ ຂອງຣັຖບາລ ແຫ່ງພຣະຣາຊອານາຈັກລາວ.

**<u>ຣັຖບາລຊຸດທີ່ 6</u>**

ຕາມພະຣາຊອົງການສະບັບທີ່ 76 ລົງວັນທີ່ 21 ເດືອນມີນາ (March) ປີ 1956 ອາຍຸປົການ ແຕ່ ວັນທີ່ 21 ເດືອນມີນາ (March) ປີ 1956 ເຖິງວັນທີ່ 23 ກໍລະກະດາ (July) ປີ 1957.

- ເຈົ້າສູວັນນາພູມາ ນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ກະຊວງຕ່າງປະເທສ, ປ້ອງກັນປະເທສ, ໂຍທາ.
- ກະຕ່າຍໂດນຊະໂສຣິດ ຮອງນາຍົກຣັຖມົນຕຣີ
- ຫຍຸຍ ອະໄພ ຣ.ມ.ຕ. ມະຫາດໄທ, ແລະ ສັງຄົມສົງເຄາະ
- ເຫຼື່ອມ ອິນສີຊຽງໃໝ່ ຣ.ມ.ຕ. ການຄັງ, ເສຖາກິດ ແລະ ແຜນຜັງ
- ໂງ່ນ ຊະນະນິກອນ ຣ.ມ.ຕ. ກະຊວງສຶກສາທິການ
- ອູ່ນເຮືອນ ນໍຣະສິງ ຣ.ມ.ຕ. ຍຸຕິທັມ ແລະ ທັມມະການ
- ເຈົ້າສຸກ ບົວວົງ ຣ.ມ.ຕ. ໂຍທາທິການ ແລະ ຂົນສົ່ງ
- ດຣ. ທອງດີ ສູນທອນວິຈິດ ຣ.ມ.ຕ. ໄປຊະນີ ແລະ ໂທຣະຄົມມະນາຄົມ
- ດຣ.ອຸດົມ ສູວັນນະວົງ ຣ.ມ.ຕ. ກະຊວງສາທະຣະນະສຸກ
- ທ່ານ ບົວສີ ຣ.ມ.ຕ. ຊ່ວຍວ່າການ ສຳນັກ ນາຍົກຣັຖມົນຕຣີ
- ທົງ ສຸດທິວົງນໍຣາຊ ຣ ມ ຕ ຊ່ວຍວ່າການ ສຳນັກ ນາຍົກຣັຖມົນຕຣີ
- ໜູອີ້ງ ຣັຕະນະວົງ ຣ ມ ຕ ຊ່ວຍວ່າການ ກະຊວງຍຸຕິທັມ
- ໜູຜາດ ຈຸນລະມານີ ຣ ມ ຕ ຊ່ວຍວ່າການ ກະຊວງການຄັງ
- ເຈົ້າ ສົມສະນິດ ຣ ມ ຕ ຊ່ວຍວ່າການ ກະຊວງມະຫາດໄທ ແລະ ສັງຄົມສົງເຄາະ

ຣັຖບາລຊຸດນີ້ໄດ້ຮັບຄວາມໄວ້ວາງໃຈ ຈາກຜູ້ແທນຣາຊດອນ ຊຸດທີ່ 3 ຊຶ່ງຖືກເລືອກຂຶ້ນເມື່ອວັນທີ່ 24 ເດືອນທັນວາ (December ) ປີ 1955. ຄນະຣັຖບາລໄດ້ <u>ພົ້ນຕຳແໜ່ງ</u> ລາອອກ ເພື່ອຈັດຕັ້ງຣັຖບາລໃໝ່ ຕາມຂໍ້ຕົກລົງ <u>ລາວຮອມລາວ.</u> ໃນວັນທີ່ 6-14 ເດືອນມັງກອນ (January) ປີ 1956, ຄນະປະເທສລາວໄດ້ປະກາສ ຕັ້ງກອງກຳລັງປະກອບອາວຸທ ເພື່ອປົດປ່ອຍຊາຕ. ໃນວັນທີ່ 6 ເດືອນມີນາ (March) ປີ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

1956, ເຈົ້າສຸວັນນາພູມມາ ໄດ້ປະກອບຣັຖະບາລອີກ. ໃນວັນທີ່ 29 ເດືອນກັນຍາ (September) ປີ 1956, ສະພາຣາຊມົນຕຣີ ໄດ້ຕົກລົງ ໃຫ້ມີການເຕົ້າໂຮມລາວສອງຝ່າຍ. ໃນວັນທີ່ 28 ເດືອນທັນວາ (December) ປີ 1956, ຣັຖບາລຝ່າຍວຽງຈັນທນ໌ ແລະຝ່າຍປະເທສ ລາວໄດ້ຕົກລົງຈັດຕັ້ງຣັຖບາລ ປະສົມ ແລະໄດ້ທວງເອົາສອງແຂວງ ທີ່ຢູ່ພາຍໃຕ້ການຄອບຄອງ ຂອງ ຄນະປະເທສລາວ ຄືນສູ່ພາຍໃຕ້ການປົກຄອງຂອງ ຣັຖບາລປະສົມ. ໃນວັນທີ່ 2 ເດືອນພຶສຈິກາ (November) ປີ 1957, ຝ່າຍຣັຖບາລ ວຽງຈັນທນ໌ ແລະຝ່າຍປະເທສລາວໄດ້ເຊັນສັນຍາ ຈັດຕັ້ງຣັຖບາລ ປະສົມ ສອງຝ່າຍແນໃສ່ເດືອນ ວັນທີ່ 19 ເດືອນພຶສຈິກາ (November) ປີ 1957.

## ຣັຖບາລຊຸດທີ່ 7

ຕາມພະຣາຊອົງການສບັບ 163 ລົງວັນທີ່ 9 ເດືອນສິງຫາ (August) ປີ 1957 ມີອາຍຸ ແຕ່ ວັນທີ່ 23 ເດືອນກໍລະກະດາ (July) ປີ 1957, ເຖິງ ວັນທີ່ 18 ເດືອນພະຈິກ (November) ປີ 1957.

- ເຈົ້າ ສູວັນນາພູມາ — ນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ປ້ອງກັນປະເທສ
- ກະຕ່າຍ ໂດນສະໂສຣິດ — ຣ.ມ.ຕ. ມະຫາດໄທ, ເສຖາກິດ ແລະ ສັງຄົມສົງເຄາະ
- ຜຸຍ ຊະນະນິກອນ — ຣ.ມ.ຕ. ຕ່າງປະເທສ, ໂຍທາທິການ ແລະ ແຜ່ນຜັງ
- ເຫຼືອມ ອິນສີຊຽງໃໝ່ — ຣ.ມ.ຕ. ການຄັງ, ຍຸຕິທັມ ແລະ ທັມມະການ
- ຫຍຸຍ ອາໄພ — ຣ.ມ.ຕ. ກະຊວງສຶກສາທິການ
- ດຣ. ອຸດົມ ສຸວັນນະວົງ — ຣ.ມ.ຕ ສາທາຣະນະສຸກ, ໄປສະນີ ແລະ ໂທຣະຄົມມະນາຄົມ

ພົ້ນຕໍາແໜ່ງລາອອກ ເພື່ອຈັດຕັ້ງ ຣັຖບາລປະສົມ ຫລັງຈາກການໂຮມລາວ ໃນວັນທີ່ 18 ເດືອນພຶສຈິກາ (November) ປີ 1957.

## ຣັຖບານລຊຸດທີ່ 8

ບໍ່ມີພະຣາຊອົງການແຕ່ງຕັ້ງ ແຕ່ມີອາຍຸປົການແຕ່ ວັນທີ່ 18 ເດືອນພຶສຈິກາ (November) ປີ 1957 ເຖິງ ວັນທີ່ 23 ເດືອນກໍລະກະດາ (July) ປີ 1958.

- ເຈົ້າ ສຸວັນນາພູມາ — ນາຍົກຣັຖມົນຕຣີ,ໄປສະນີໂທຣະເລກ ແລະ ໂຍທາ
- ກະຕ່າຍ ໂດນສະໂສຣິດ — ຣ.ມ.ຕ. ມະຫາດໄທ ແລະ ສົງເຄາະ
- ຫຍຸຍ ອາໄພ — ຣ.ມ.ຕ. ກະຊວງສຶກສາທິການ
- ເຫຼືອມ ອິນສີຊຽງໃໝ່ — ຣ.ມ.ຕ. ກະຊວງການຄັງ
- ອູ່ນເຮືອນ ນໍຣະສິງ — ຣ.ມ.ຕ. ກະຊວງເສຖາກິດ
- ເຈົ້າ ສຸກ ວົງສັກ — ຣ.ມ.ຕ. ກະຊວງໂຍທາ ແລະ ຂົນສົ່ງ
- ດຣ. ອູດົມ ສຸວັນນະວົງ — ຣ.ມ.ຕ. ກະຊວງສາທາຣະນະສຸກ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ເຈົ້າ ສຸພານຸວົງ ຣ.ມ.ຕ. ແຜນພັງ , ກໍ່ສ້າງ ແລະ ຟື້ນຟູຊົນນະບົດ
- ພູມີ ວົງວິຈິດ ຣ.ມ.ຕ. ທັມມະການ
- ໂງ່ນ ຊະນະນິກອນ ຣ.ມ.ຕ. ປ້ອງກັນປະເທສ
- ດຣ. ທອງດີ ສູນທອນວິຈິດ ຣ.ມ.ຕ. ກະຊວງຍຸຕິທັມ
- ເຈົ້າສົມສະນິດ ຣ.ມ.ຕ. ຊ່ວຍວ່າການ ມະຫາດໄທ
- ເຈົ້າ ນິດ ໜໍຄໍາ ຣ ມ ຕ ຊ່ວຍວ່າການກະຊວງ ການຄັງ
- ໜູຜາດ ຈຸນລະມານີ ຣ ມ ຕ ຊ່ວຍວ່າການກະຊວງ ເສຖາກິດ
- ບົວສີ ຣ ມ ຕ ຊ່ວຍວ່າການກະຊວງ ໂຍທາ ແລະ ຂົນສົ່ງ.

ພື້ນຕໍາແໜ່ງ ເນື່ອງຈາກມີການໂຮມພັຄກ້າວໜ້າແລະພັຄປະເທສລາວ ເຂົ້າກັນເປັນພັກໂຮມລາວ ພາຍຫລັງການເລືອກຕັ້ງເພີ່ມ ອັນມີພັຄແນວລາວຮັກຊາຕ ເຂົ້າຮ່ວມນໍາ. ຄນະ ຜູ້ແທນຝ່າຍ ຜຸຍ ຊະນະນິກອນ ທີ່ໄດ້ສຽງສ່ວນຫລາຍ ໃນສະພາແຫ່ງຊາຕ ໄດ້ລົງມະຕິບໍ່ໄວ້ວາງໃຈຣັຖບາລ ໃນວັນທີ່ 23 ເດືອນກໍລະກະດາ (July) ປີ 1958.

ເລີ່ມຕົ້ນປີ 1957 ຣ.ອ. ກອງແລ ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ກໍາກັບ ການຝຶກຊອ້ມ ໜ່ວຍທະຫານ ກ້າຕາຍ ຂອງກອງ ທັພແຫ່ງຊາຕລາວ ຢູ່ຄ້າຍຈີໄນໂມ້. ຣ.ອ. ກອງແລ ໄດ້ຖືໂອກາດເວລານັ້ນເຂົ້າໄປພົບ ເຈົ້າ ສຸພານຸວົງ ຢູ່ບ້ານພັກ ປາກປາສັກ ແຄມນໍ້າຂອງ, ຢູ່ນະຄອນວຽງຈັນທນ໌, ໃນຕອນຄໍ່າເປັນເນື່ອງນິດ. ຣ.ອ. ກອງແລ ເປັນຜູ້ຊື່ງເຈົ້າສຸພານຸວົງສ໌ ບັນທຶກວ່າ: ແມ່ນແຂ້ວເລັບແຫລມ ບອກໄດ້ໃຊ້ຟັງ ແລະເຊື່ອໃຈໄດ້. ໃນເວລານັ້ນ ເຈົ້າໜ້າທີ່ຝ່າຍຣັຖະບາລວຽງຈັນທນ໌ ບໍ່ມີຜູ້ໃດສົນໃຈຕໍ່ການເຄື່ອນໄຫວຕ່າງໆ ຂອງ ຣ.ອ. ກອງແລ.

ໃນເດືອນພຶສພາ (May) ວັນທີ່ 4, 1958, ໄດ້ມີການຕົກລົງ ວາງແຜນການເລືອກຕັ້ງຜູ້ແທນຣາສດອນ ເພີ່ມທີ່ນັ່ງ ໂດຍມີຝ່າຍວຽງຈັນທນ໌ ແລະຝ່າຍຄນະປະເທສລາວ ປະກາສລາຍຊື່ຜູ້ຮັບສມັກ, ແລະການໂຄສະນາຫາສຽງ. ໃນເດືອນມິຖຸນາ (June) ວັນທີ່ 10, 1958, ເປັນມື້ປ່ອນບັດເລືອກຕັ້ງຜູ້ແທນຣາຊດອນ ເພີ້ມຂອງສອງຝ່າຍ ຝ່າຍຣັຖະບາລວຽງຈັນທນ໌ ແລະ ຝ່າຍຄນະປະເທສລາວ. ພຍາຕູ້ບີ ລີຟູງ ໄດ້ຮັບ ເລືອກຕັ້ງເປັນຜູ້ແທນຣາຊດອນໃນຊຸດນັ້ນ. ໃນເດືອນ ກໍຣະກະດາ (July) ວັນທີ່ 19, 1958 ຄນະກັມມະການ ສາກົນກວດກາ ໄດ້ຍົກເລີກການກວດກາ ຢູ່ລາວ ແລະ ໄດ້ກັບຄືນສູ່ປະເທສຂອງເຂົາ. ໃນເດືອນກໍລະກະດາ (July) ວັນທີ່ 22, ປີ 1958, ຣັຖະບາລ ຂອງເຈົ້າສຸວັນນາພູມາຖືກຍູບ, ດ້ວຍເຫຕວ່າ ສະຫາຣັຖ ຕັດການຊ່ວຍເຫລືອລາວ, ຍ້ອນມີພັຄຄອມມຸຍນິສຕ໌ ຮ່ວມຢູ່ໃນຣັຖະບາລຂອງລາວ. ໃນເດືອນສິງຫາ (August) ວັນທີ່ 18, 1958 ທ່ານຜຸຍ ຊະນະນິກອນ ໄດ້ປະກອບຣັຖບາລຂື້ນ ໂດຍບໍ່ມີສະມາຊິກ ຈັກຄົນ ຂອງຄນະ ປະເທສລາວ ເຂົ້າຮ່ວມຢູ່ໃນຄນະຣັຖບາລລາວດັ່ງຕໍ່ໄປນີ້:


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ຣັຖບາລຊຸດທີ່ 9**

ພະຣາຊອົງການ ສບັບ 206 ລົງວັນທີ່ 18 ສິງຫາ (August) ປີ 1958 ອາຍຸປົການແຕ່ ວັນທີ່ 18 ສິງຫາ (August) ປີ 1958 ເຖິງ ວັນທີ່ 30 ທັນວາ (December) ປີ 1959.

- ຜຸຍ ຊະນະນິກອນ — ນາຍົກຣັຖມົນຕຣີ, ແຜ່ນຜັງ, ໂຍທາ ແລະ ຄົມມະນາຄົມ
-ກະຕ່າຍ ໂດນສະໂສຣິດ — ຮອງນາຍົກຣັຖມົນຕຣີ, ຣ.ມ.ຕ. ປ້ອງກັນປະເທສ ແລະ ນັກລົບເກົ່າ
- ບົງ ສຸວັນນະວົງ — ຣ.ມ.ຕ. ສຶກສາທິກາຣ, ສາທະຣະນະສຸກ ແລະ ທັມະການ
- ຄຳພັນ ປັນຍາ — ຣ.ມ.ຕ. ກະຊວງການ ຕ່າງປະເທສ
- ອິນແປງ ສຸຣິຍະໄທ — ຣ.ມ.ຕ. ກະຊວງ ຍຸຕິທັມ
- ສີສຸກ ນະຈຳປາສັກດິ໌ — ຣ.ມ.ຕ. ຖແລງຂ່າວ ແລະ ໂຄສະນາການ
- ເຫຼື່ອມ ຣາຊສົມບັດ — ຣ.ມ.ຕ. ການຄັງ ແລະ ເສຖາກິດ
- ປານ ສີສຸພັນທອງ — ຣ ມ ຕ ຊ່ວຍ ກະຊວງ ໂຍທາທິການ
- ຕານ ຈຸນລະມານີ — ຣ ມ ຕ ຊ່ວຍ ກະຊວງ ສາທາຣະນະສຸກ
- ລຽບ ພິໄຊຈຸມພົນ — ຣ ມ ຕ ຊ່ວຍ ກະຊວງ ນັກລົບເກົ່າ
- ຄຳຣະຍົກ ສຸວັນນະວົງ — ຣ ມ ຕ ຊ່ວຍ ກະຊວງປ້ອງກັນປະເທສ

ໄດ້ມີການປັບປຸງ ຄັ້ງທີ່ 01 ຫລັງຈາກໄດ້ຮັບອຳນາດສິດເດັດຂາດ ບໍຣິຫາຣປະເທສອີກ 1 ປີ ແລ້ວ ທ່ານ ຜຸຍ ຊນະນິກອນ ໄດ້ປັບປຸງຣັຖບາລເມື່ອວັນທີ່ 24 ມີນາ ປີ 1959 ຕາມພຣະຣາຊອົງການ ສບັບທີ່ 36 ລົງ ວັນທີ່ 24 ມີນາ ປີ 1959 ດັ່ງນີ້:

- ຜຸຍ ຊະນະນິກອນ — ນາຍົກຣັຖມົນຕຣີແລະ ຣ.ມ.ຕ. ກະຊວງແຜ່ນຜັງ ແລະ ປະຊາສົງເຄາະ
- ກະຕ່າຍ ໂດນສະໂສຣິດ — ຮອງນາຍົກ ແລ ຣ.ມ.ຕ. ກະຊວງ ມະຫາດໄທ
- ບົງ ສຸວັນນະວົງ — ຣ.ມ.ຕ. ໂທຣະຄົມມະນາຄົມ ແລະ ສິນລະປະກອນ
- ຄຳພັນ ປັນຍາ — ຣ.ມ.ຕ. ກະຊວງ ຕ່າງປະເທສ ແລະ ສຶກສາທິກາ.
- ເຫຼື່ອມ ອິນສີຊຽງໃໝ່ — ຣ.ມ.ຕ. ກະຊວງຄັງ ແລະ ເສຖກິດ
- ສູນທອນ ປະທັມມະວົງ — ຣ.ມ.ຕ. ກະຊວງປ້ອງກັນປະເທສ ແລະ ທະຫາຣຜ່ານເສິກ
- ສີສຸກ ນະຈຳປາສັກດິ໌ — ຣ.ມ.ຕ. ກະຊວງ ຖແລງຂ່າວ, ໂຄສະນາການ, ກິລາ ແລະ ຍຸວະຊົນ
- ອິນແປງ ສຸຣິຍະໄທ — ຣ.ມ.ຕ. ຊ່ວຍ ກະຊວງສຶກສາທິການ
- ປານ ສີສູພັນທອງ — ຣ.ມ.ຕ. ຊ່ວຍ ກະຊວງໂຍທາທິການ ແລະ ຂົນສົ່ງ
- ຕານ ຈຸນລະມານີ — ຣ.ມ.ຕ. ຊ່ວຍ ກະຊວງຍຸຕິທັມ
- ລຽບ ພິໄຊຈຸມພົນ — ຣ.ມ.ຕ. ຊ່ວຍ ກະຊວງ ກະສິກັມ ແລະ ປ່າໄມ້
- ຄຳຣະຍົກ ສຸວັນນະວົງ — ຣ.ມ.ຕ. ຊ່ວຍ ກະຊວງມະຫາດໄທ ແລະ ທັມມະການ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ພ.ອ. ພູມີ ໜໍສວັນ ຣ.ມ.ຕ. ຊ່ວຍ ກະຊວງປ້ອງກັນປະເທສ ແລະ ທະຫາຣຜ່ານເສິກ
- ພ.ທ. ອຸດອນ ຊະນະນິກອນ ຣ.ມ.ຕ. ຊ່ວຍ ກະຊວງປະຊາສົງເຄາະ

**ການປັບປຸງຄັ້ງທີ່ 2** ເນື່ອງຈາກການຂັດແຍ່ງກັນລະຫວ່າງຄນະກັມການປ້ອງກັນປະໂຍດແຫ່ງຊາຕ ກັບ ກູ່ມການເມືອງ ຂອງທ່ານຜຸຍ ຊນະນິກອນ ກ່ງວກັບການຕໍ່ອາຍຸສະພາແຫ່ງຊາຕຊຸດທີ່ 3 ຣັຖບາລຈຶ່ງ ໄດ້ຣັບການປັບປຸງ ຕາມພະຣາຊອົງການ ສບັບທີ່ 398 ລົງວັນທີ່ 14 ທັນວາ ປີ 1959 ດັ່ງນີ້:

- ຜຸຍ ຊນະນິກອນ ນາຍົກຣັຖມົນຕຣີ ແລະ ຣ.ມ.ຕ. ຕ່າງປະເທສ, ປ້ອງກັນປະເທສ, ປັບປຸງ ໝູບ້ານ, ໂຍທາທິການ, ໂຄສະນາການ, ກິລາ ແລະຍຸວະຊົນ.
- ກະຕ່າຍ ໂດນສະໂສຣິດ ຣອງນາຍົກ ແລະ ຣ.ມ.ຕ. ກະຊວງມະຫາດໄທ, ທັມມະການ ແລະ ຍຸຕິ ທັມ
- ເຫລື່ອມ ອິນສີຊຽງໃໝ່ ຣ.ມ.ຕ. ກະຊວງສຶກສາທິການ, ສາທາຣະນະສຸກ ແລະ ປະຊາສົງເຄາະ
- ເຈົ້າ ສົມສະນິດ ຣ.ມ.ຕ. ກະຊວງຄັງ ແລະ ແຜ່ນຜັງ
- ເຈົ້າ ນິດ ໜໍ່ຄໍາ ຣ.ມ.ຕ. ກະຊວງ ເສຖາກິດ
- ຄໍຣະຍົກ ສຸວັນນະວົງ ຣ.ມ.ຕ. ຊ່ວຍ ກະຊວງ ມະຫາດໄທ
- ປານ ສີສຸພັນທອງ ຣ.ມ.ຕ. ຊ່ວຍ ກະຊວງ ຍຸຕິທັມ
- ຊຸນອ່ອນ ວໍຣະວົງ ຣ.ມ.ຕ. ຊ່ວຍ ປະຈໍາສໍານັກນາຍົກ
- ຄໍາກິ່ງ ສຸວັນລາສີ ຣ.ມ.ຕ. ຊ່ວຍ ປະຈໍາສໍານັກນາຍົກ

ພື້ນຕໍາແໜ່ງລາອອກ ເພາະບໍ່ສາມາດຄວບຄູມສຖານະການໄດ້ ຍ້ອນຄນະກັມມະການ ປ້ອງກັນຜົລ ປະໂຍດແຫ່ງຊາຕ ມີສຽງຫລາຍຂຶ້ນ ແລະ ຜຸຍຊະນະນິກອນຖືກໂຈມຕີຢ່າງໜັກ. ຄນະກັມມະການປ້ອງ ກັນ ຜົລປະໂຍດຂອງຊາຕ ອັນມີນາຍພົນສູນທອນ ປະທັມມະວົງ ເປັນຫົວໜ້າ ໄດ້ເຮັດຣັຖປະຫານ ແລ້ວ ມອບໃຫ້ກຸອາໄພ ຈັດຕັ້ງຣັຖບາລຊົ່ວຄາວ ເພື່ອຈັດການເລືອກຕັ້ງ (ສ. ສ.) ຊຸດທີ່ 4 ຂຶ້ນ.

ເຫຕການຕ່າງໆເກີດຂຶ້ນດັ່ງນີ້: ໃນວັນທີ່ 7 ເດືອນພຶສະພາ (May ) ປີ 1959, ໃຫ້ເອົາ ສອງກອງພັນ ທີ່ປະຈໍາຢູ່ຊໍາເໜືອແລະຊຽງຂວາງ ເຂົ້າຮ່ວມກັບກອງທັພແຫ່ງຊາຕ ແຕ່ຝ່າຍປະເທສລາວບໍ່ຍອມ, ບໍ່ເຫັນ ດີ. ນາຍພົນ ອ້ວນ ຣະຕິກຸນ ຈຶ່ງໄດ້ເດີນທາງໄປທົ່ງໄຫຫີນ ໃນວັນທີ່ 11 ເດືອນພຶດສະພາ (May) 1959 ເພື່ອເຂົ້າໄປພົບເຈຣະຈາ ກັບກອງພັນ 2 ຂອງ ລາວ ຄ.ມ.ນ. ແຕ່ກໍຖືກຝ່າຍ ລາວ ຄ.ມ.ນ. ຂູ່ແລະ ເອົາປືນຈີ້. ນາຍພົນອ້ວນ ຣະຕິກຸນ ຕ້ອງບິນກັບວຽງຈັນທນ໌ ແລ້ວໄດ້ສັ່ງກໍາລັງກອງທັບຂອງຕົນ ປິດລອ້ມ ກອງພັນ 2 ຂອງຝ່າຍປະເທສລາວ ທີ່ທົ່ງ ໄຫຫີນໄວ້ ຜ.ບ. ແມ່ນ ພ.ທ. ຕູ້ ຢາ.

ໃນວັນທີ່ 17 ເດືອນພຶສະພາ (May) ປີ 1959 ກອງພັນປະເທສລາວ ທໍາທ່າໃຫ້ຄໍາຕອບວ່າ: ຍອມຈໍາ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ນິນ ຈະເຂົ້າຮ່ວມກັບຝ່າຍກອງທັພລາວ ພາຍໃນ 24 ຊົ່ວໂມງ ແຕ່ຕອນຄ່ຳ ໃນວັນທີ່ 18 ເດືອນ ພຶສພາ (May) 1959 ຝົນໄດ້ຕົກໜັກ ພໍຕື່ນເຊົ້າຂຶ້ນມາ ທະຫານຝ່າຍວຽງຈັນທນ໌ ໄດ້ພົບເຫັນຄ້າຍຂອງ ຝ່າຍປະເທສລາວ ຫວ່າງເປົ່າ ໄດ້ໂຕນໜີໄປໝົດແລ້ວ. ນາຍພົນອ້ວນ ຣະຕິກຸນ ໄດ້ສັ່ງຫລາຍກອງ ພັນທະຫານລາວຝ່າຍວຽງຈັນທນ໌ ໄລ່ຕິດຕາມໄປຫາປາກຊັນ ແລະທາງໄປຫາບ້ານບານ ແຕ່ບໍ່ພົບ ຈຶ່ງໄດ້ສັ່ງພັນຕຣີ ວ່າງປາວ ໃຫ້ຊອກທະຫານເຜົ່າ ລາວສູງ "ມົ້ງ" ໄລ່ຕິດຕາມ ນຳພາໂດຍ ຣ.ອ. ລີປາວ ຈຶ່ງໄດ້ໄປພົບ ຢູ່ໃກ້ໆແຖວເມືອງໝອກ, ໄດ້ມີການຕໍ່ສູ້ກັນບາງເລັກນ້ອຍ ເຮັດໃຫ້ພັນໂທ ຕູ້ຢາ ຖືກບາດ ເຈັບທີ່ຂາ ໄດ້ມີສຽງເດັກແລະແມ່ຍິງຮອ້ງໄຫ້ດັງຂຶ້ນມາ ພາໃຫ້ ຣ.ອ. ລີປາວໄດ້ຮູ້ວ່າແມ່ນເດັກ ແລະ ແມ່ຍິງ ສ່ວນຫລາຍແມ່ນຄົນເຜົ່າລາວສູງ "ມົ້ງ". ດັ່ງນີ້, ຣ.ອ. ລີປາວ ຈຶ່ງໄດ້ ລາຍງານໃຫ້ ຂັ້ນສູງ ພ.ຕ. ວ່າງປາວ ຊາບ. ພ.ຕ. ວ່າງປາວ ຈຶ່ງໄດ້ສັ່ງໃຫ້ຝ່າຍຕົນ ຖອ່ນອອກ ປະໃຫ້ກອງ ພັນ 2 ປະເທສລາວ ໄດ້ຜ່ານໄປ.

ໃນວັນທີ່ 25 ເດືອນພຶດສະພາ (May) 1959, ພວກຜູ້ນຳຂອງຄນະປະເທສລາວ ໄດ້ຖືກເຈົ້າໜ້າທີ່ ຂອງຣັຖບາລ ພນະທ່ານຜຸຍ ຊນະນິກອນ ທຳການຈັບກູມ ເອົາໄປກັກຂັງໄວ້ ຢູ່ຄ້າຍສາຣະວັດທະຫານ ທີ່ໂພນເຄັງ, ດ້ວຍເຫຕວ່າ ຄນະປະເທສລາວ ຄັດຄ້ານບໍ່ຍອມເອົາທະຫານຂອງຕົນເຂົ້າຮ່ວມໃນ ກອງທັພແຫ່ງຊາຕ ແລະຍັງໄດ້ໂຕນໜີໄປໝົດອີກ.

ໃນວັນທີ່ 4 ເດືອນສິງຫາ (August) ປີ 1959, ຣັຖບາລໄດ້ປະກາສພາວະສຸກເສີນ ທົ່ວປະເທສ. ໃນວັນທີ່ 29 ເດືອນຕຸລາ (October) ປີ 1959, ພຣະເຈົ້າມະຫາຊີວິດ ສີສຫວ່າງວົງສ໌ ໄດ້ສວັນນະຄົດ, ໄດ້ທູນເຊີນເຈົ້າຟ້າຊາຍ ສີສຫວ່າງວັທະນາ ພຣະຣາຊໂອຣົດ ເຂົ້າມາດຳຣົງຕຳແໜ່ງແທນ.

ໃນທ້າຍປີ 1959, ຣ.ອ. ກອງແລ ຖືກແຕ່ງຕັ້ງເປັນ ຜ.ບ. ກອງພັນທະຫານ ຣາບອາກາສໂດດຈອ້ງ ທີ່ **2** ຂອງກອງທັພແຫ່ງຊາຕລາວ ຕັ້ງຢູ່ວັດໄຕ, ນະຄອນວຽງຈັນທນ໌, ພາຍໃຕ້ການປົກຄອງຂອງຣັຖບາລ ຊຶ່ງມີທ່ານຜຸຍ ຊະນະນິກອນ ເປັນນາຍົກ ຣັຖມົນຕຣີ ແລະ ຢູ່ໃນການຊ່ວຍເຫລືອຂອງສະຫາຣັຖດ້ານການຝຶກຊ້ອມ.



*<u>ຮູບທີ່ 152</u>. ພ.ທ ຕູ້ ຢາ ຜ.ບ ກອງພັນສອງ ຂອງຝ່າຍລາວ ຄ.ມ.ນ. ທີ່ມາ ຕັ້ງຢູ່ທົ່ງໄຫຫີນ ໃນປີ 1957, ລາວລວມລາວຄັ້ງທີ່ໜຶ່ງ. ໃນ ເດືອນພຶສພາ ວັນທີ່ 18, 1959, ໄດ້ໂຕນອອກຈາກທົ່ງໄຫຫີນ. ທ່ານເປັນຜູ້ສັ່ງໃຫ້ທຳ ລາຍຂົວນ້ຳຕົມ ທີ່ ບ້ານໂພນຢູ່ຫີນທາງເລກ ທີ່ 4 ຈາກທົ່ງໄຫຫີນໄປ ຊຽງຂວາງ. ທ່ານຮູ້ດີຂົວນີ້ ເປັນທັງງ ທ່ານຈຶ່ງໄດ້ເກີດອຸປະຕິເຫຕ ແລະຕາຍຢູ່ຂົວນີ້ ໃນປີ 1961. ສຳຄັນ ທີ່ຄວນຮູ້ ວ່າຜູ້ຂັບຣົຖແມ່ນຄົນວຽດ ບໍ່ຕາຍ. ການປ່ຽນແປງທາງການເມືອງຈາກ ສົງຄາມ ຝຣັ່ງເສສ ມາໃສ່ສົງຄາມລະຫວ່າງສະຫະຣັຖອາເມຣິກາ ໃນ ປີ 1961 ໄດ້ມີນັກ ການເມືອງ, ນາຍທະຫານຫລາຍຄົນ ໄດ້ໂຕນເຂົ້າມາຮວ່ມ ທ່ານນາຍ ພົນວ່າງປາວ ແລະ ຝ່າຍຣັຖບານວຽງຈັນທນ໌. ການຕາຍຂອງ ພ.ທ ຕູ້ ຢາ ອາດມີ ສ່ວນກ່ຽວ ຂອ້ງກັບການເມືອງ ໃນ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

*ການປ່ຽນແປງນີ້ກໍເປັນໄດ້ ເພາະ ວຽດ ບໍ່ໃຫ້ໜີໄດ້. (ມີບັນທຶກ ຢູ່ໃນປຶ້ມ "ຕູ້ຢາ ໄຊຈູ ວີຣະບຸຣຸດ ແຫ່ງແດນ ລ້ານຊ້າງ" ໜ້າ 96" ຂຽນດັ່ງນີ້ "ເມື່ອຮູ້ວ່າ ຕູ້ຢາ ເສັຍສະຫລະ ຊີວິດແລ້ວ ນາຍພົນວັງປາວ ໄດ້ສັ່ງໃຫ້ກຳລັງຂອງຕົນ ຢຸດການ ສູ້ລົບທົ່ວໄປຊົ່ວຄາວ ເພື່ອ ໄວ້ອາໄລ ເຖິງດວງວິນຍານຂອງ ຕູ້ຢາ. ທ່ານໄດ້ເວົ້າ ວ່າ "ເຮົາຮູ້ສຶກເສັຍໃຈ ທີ່ສຸດ ຕໍ່ການຈາກໄປຂອງທ່ານ ຕູ້ຢາ ທ່ານເປັນນາຍທະຫາຣ ທີ່ເກັ່ງກ້າ, ເປັນທີ່ ນັບຖືຂອງ ປະຊາຊົນບັນດາເຜົ່າ" )*

ໃນເດືອນທັນວາ (December) ປີ 1959, ຣັຖບາລຂອງພນະທ່ານຜຸຍ ຊນະນິກອນ ຖືກບີບບັງ ຄັບຈາກ ກອງທັພແຫ່ງຊາຕໃຫ້ ລາອອກຈາກ ຕຳແໜ່ງຣັຖບາລ. ໃນວັນທີ່ 21 ເດືອນມັງກອນ (January) ປີ 1960, ພນະທ່ານກຸອາໄພຍ໌ ໄດ້ປະກອບຣັຖບາລຊົ່ວຄາວຂຶ້ນ ເພື່ອຄວບຄູມການເລືອກຕັ້ງ ຜູ້ແທນ ຣາສດອນຊຸດໃໝ່ ຈາກທຸກພັຄການເມືອງ.

## **ຣັຖບາລຊຸດທີ່ 10**

ຕາມພະຣາຊອົງການສບັບ ເລຂທີ່ 403 ລົງວັນທີ່ 7 ມີນາ (March) 1960 ອາຍຸປີການ ເຖິງ ວັນທີ່ 30 ພຶສພາ (May ) ປີ 1960.

| | |
|---|---|
| - ກຸ ອາໄພ | ນາຍົກຣັຖມົນຕຣີ |
| - ຫຍຸຍ ອາໄພ | ຮອງນາຍົກ ແລະ ຣ.ມ.ຕ. ກະຊວງສຶກສາ, ແລະ ຍຸວະຊົນ |
| - ໂງ່ນ ຊະນະນິກອນ | ຣ.ມ.ຕ. ກະຊວງ ຍຸຕິທັມ ແລະ ທັມມະການ |
| - ຄຳພັນ ປັນຍາ | ຣ.ມ.ຕ. ກະຊວງຕ່າງປະເທສ |
| - ໜູຜາດ ຈຸນລະມານີ | ຣ.ມ.ຕ. ກະຊວງໂຄສະນາການ ແລະ ປະຊາສົງເຄາະ |
| - ເຈົ້າ ສົມສະນິດ | ຣ.ມ.ຕ. ກະຊວງ ມະຫາດໄທ |
| - ນາຍພົນ ພູມີ ໜໍ່ສວັນ | ຣ.ມ.ຕ. ກະຊວງ ປ້ອງກັນປະເທສ ແລະ ນັກລົບເກົ່າ |
| - ເຈົ້າ ສຸວັດ ໄຊຍະວົງ | ຣ.ມ.ຕ. ກະຊວງ ສາທາຣະນະສຸກ |
| - ອຸດົງ ສຸວັນນະວົງ | ຣ.ມ.ຕ. ກະຊວງ ໂຍທາ ແລະ ຂົນສົ່ງ |
| - ເຫຼື່ອມ ຣາຊສົມບັດ | ຣ.ມ.ຕ. ກະຊວງ ການຄັງ ແລະ ເສດຖາກິດ |

ພົ້ນຕຳແໜ່ງລາອອກ ພາຍຫລັງການເລືອກຕັ້ງ (ສ. ສ) ຊຸດທີ່ 4 (ຣັຖະບາລເຈົ້າ ສົມສະນິດ). ໃນວັນທີ່ 24 ເດືອນເມສາ (April) 1960, ການເລືອກ ຕັ້ງຜູ້ແທນຣາຊດອນ ໄດ້ຮັບຜົລສຳເຣັດ ມີແຕ່ຜູ້ແທນຝ່າຍຂວາ ຈັດເທົ່ານັ້ນ ຄືຄນະກັມການປ້ອງກັນປະໂຍດແຫ່ງຊາຕ ຊຶ່ງເປັນພັຄໃໝ່ຂອງເຈົ້າສົມສະນິດ ທີ່ໄດ້ຮັບໄຊ຺ຍ ຊະນະ ແລະໄດ້ປະກອບຣັຖບາລຂຶ້ນໂດຽແມ່ນ ເຈົ້າສົມສະນິດເປັນນາຍົກຣັຖມົນຕຣີ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ຣັຖບາລຊຸດທີ່ 11

ຕາມພະຣາຊອົງການ ເລກທີ່ 151 ລົງວັນທີ່ 6 ເດືອນເມສາ (April) 1960 ຄນະກັມການປ້ອງກັນຜົລປະໂຍດແຫ່ງຊາຕໄດ້ຮັບໄຊ໌ຍຊນະ ໂດຽໃຊ້ອຳນາຕຂູ່ຂວັນການເລືອກຕັ້ງ (ສ.ສ) ຊຸດ 4 ແລ້ວໄດ້ມອບໃຫ້ເຈົ້າສົມສະນິດ ປະກອບຣັຖບາລດັ່ງຕໍ່ໄປນີ້:

| | |
|---|---|
| - ເຈົ້າ ສົມສະນິດ | ນາຍົກຣັຖມົນຕຣີ, ມະຫາດໄທ ແລະ ປັບປູງຖານະຂ້າຣາຊການ |
| - ຄຳພັນ ປັນຍາ | ຣ.ມ.ຕ. ຕ່າງປະເທສ |
| - ນາຍພົນ ພູມີ ໜໍ່ສວັນ | ຣ.ມ.ຕ. ກະຊວງປ້ອງກັນປະເທສ ແລະ ທະຫາຣຜ່ານເສິກ |
| - ອິນແປງ ສຸຣິຍະໄທ | ຣ.ມ.ຕ. ກະຊວງຄັງ ແລະ ແຜ່ນຜັງ. |
| - ໂງ່ນ ຊະນະນິກອນ | ຣ.ມ.ຕ. ກະຊວງຍຸຕິທັມ ແລະ ທັມມະການ |
| - ເຫຼື່ອມ ອິນສີຊຽງໃໝ່ | ຣ.ມ.ຕ. ກະຊວງໂຄສະນາ ແລະ ປະຊາສົງເຄາະ |
| - ນິດ ສິງຫາຣາຊ | ຣ.ມ.ຕ. ໂຍທາທິກາຣ, ໄທຣະຄົມມະນາຄົມ ແລະ ຂົ່ນສົ່ງ |
| - ແກ້ວ ວິພະກອນ | ຣ.ມ.ຕ. ເສຖາກິດ ແລະ ປັບປູງໝູ່ບ້ານ |
| - ຫຍຸຍ ອາໄພ | ຣ.ມ.ຕ. ສຶກສາທິກາຣ ແລະ ສິລະປະກອນ |
| - ກຸແກ້ວ ໄຊໂກສີ | ຣ.ມ.ຕ. ກະຊວງສາທາຣະນະສຸກ |
| - ພວງເພດ ພັນນາເຣດ | ຣ.ມ.ຕ. ຊ່ວຍວ່າການຄັງ ແລະ ແຜ່ນຜັງ |
| - ອຸ ວໍຣະວົງ | ຣ.ມ.ຕ. ຊ່ວຍວ່າການໂຍທາທິການ, ໄທຣະຄົມມະນາຄົມ ແລະ ຂົ່ນສົ່ງ |
| - ບົວວັນ ນໍຣະສິງ | ຣ.ມ.ຕ. ຊ່ວຍວ່າການ ຍຸຕິທັມ ແລະ ທັມມະກາຣ |
| - ຕຸບີ ລີຟູງ | ຣ.ມ.ຕ. ຊ່ວຍວ່າການ ໂຄສະນາ ແລະ ປະຊາສົງເຄາະ |

ຣັຖບານນີ້ ໄດ້ແຕ່ງຕັ້ງໃຫ້ເຈົ້າສຸວັນນະພູມມາ ໄປເປັນທູດລາວປະຈຳ ປະເທດຝຣັ່ງເສດ. ໃນວັນທີ່ 23 ເດືອນ ພຶສະພາ (May) ປີ 1960, ຄນະຜູ້ນຳຂອງພັຄປະເທສລາວ ທີ່ຖືກຄຸມຂັງຢູ່ຄຸກທີ່ຄ້າຍໂພນເຄັງ ໄດ້ແຫກຄຸກໄປໄດ້ຢ່າງງ່າຍດາຍ ດ້ວຍການນຳພາຂອງເຈົ້າໜ້າທີ່ ຜູ້ຮັກສາເວັນຍາມນັ້ນເອງ. ໃນເວລານັ້ນຣັຖບາລ ກຳລັງຫຍູ້ງຢູ່ກັບການຕຽມພິທີຖວາຍພຣະເພີງຂອງ ພຣະເຈົ້າມະຫາຊີວິດສີສຫວ່າງ ວົງສ໌ ຢູ່ຫລວງພຣະບາງ ແລ້ວກໍ່ພົ້ນຕຳແໜ່ງ ຍ້ອນຖືກຮ້ອຍເອກກອງແລ ເຮັດຣັຖປະຫາຣໂຄ່ນລົ້ມ ຍຶດນະຄອນວຽງຈັນທນ໌ ແລ້ວມອບໃຫ້ເຈົ້າສຸວັນນາພູມາ ຈັດຕັ້ງຣັຖບາລຣັຖປະຫາຣຂຶ້ນ.

## ຣ.ອ ກອງແລ ໄດ້ລົງມືປະຕິວັຕ ຣັຖປະຫາຣ ຂຶ້ນ ແລະ ໄດ້ຕັ້ງຣັຖບາລ ທີ່ປະກາສຄວາມເປັນກາງ

ໃນວັນທີ່ 9 ສິງຫາ (August) 1960, ຣ.ອ ກອງແລ ໄດ້ທຳການຣັຖປະຫາຣ ໂຄນລົ້ມຣັຖບາລຂອງເຈົ້າສົມສະນິດ ແລະນາຍພົນ ພູມີ ໜໍສວັນ. ຣ.ອ ກອງແລ ໄດ້ຖືໂອກາສນັ້ນ ນຳເອົາທະຫາຣຄນະປະເທສລາວ ແລະ ທະຫາຣຄອມມຸຍນິສ ວຽດນາມເໜືອ ຈຳນວນຫລາຍກອງພັນ ເຂົ້າໄປຮັກສາປ້ອງກັນນະຄອນວຽງຈັນທນ໌, ຮ່ວມກັບກຳລັງຂອງຄນະຣັຖປະຫາຣ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ຣັຖບາລຊຸດ ຣັຖປະຫານ ຂອງກອງແລ**

- ເຈົ້າ ສຸວັນນາພູມາ          ນາຍົກຣັຖມົນຕຣີ, ປ້ອງກັນປະເທສ ນັກຣົບເກົ່າ ແລະ ຕ່າງປະເທສ
- ຕູ້ບີ ລີຟູງ          ຣ.ມ.ຕ. ຍຸຕິທັມ, ທັມະກາຣ ແລະ ໂຄສະນາ
- ກົມີນ ພົນເສນາ          ຣ.ມ.ຕ. ມະຫາດໄທ, ກິລາ ແລະ ຍຸວະຊົນ
- ຄຳສຸກ ແກ້ວລາ          ຣ.ມ.ຕ. ສາທາຣະນະສຸກ, ສຶກສາ, ປະຊາສົງເຄາະ ແລະ ປັບປູງໝູ່ບ້ານ
- ຄຳກິ່ງ ສຸວັນລາສີ          ຣ.ມ.ຕ. ການຄັງ ແລະ ເສຖາກິດ
- ຄຳສິງ ໂງນວໍຣາຣາຊ          ຣ.ມ.ຕ. ກະຊວງໂຍທາທິການ
- ເຈົ້າ ບູນອອົມ ນະຈຳປາສັກ          ຣ.ມ.ຕ. ຊ່ວຍວ່າການ ປ້ອງກັນປະເທສ ແລະ ນັກລົບເກົ່າ
- ເຈົ້າ ສີສຸມັງ ສີສເລີມສັກ          ຣ.ມ.ຕ. ຊ່ວຍວ່າການ ປະຊາສົງເຄາະ ແລະ ປັບປູງໝູ່ບ້ານ

ເຈົ້າສູວັນນາພູມາ ໄດ້ສົ່ງຜູ້ຕາງໜ້າ ຄື: ນາຍພົນອຳຄາ ສຸຄະວົງ ແລະພະຍາ ຕູ້ບີ ລີຟູງ ໄປແຂວງຊຽງຂວາງ ແຕ່ພັນຕຣີ ວ່າງປາວ ໄດ້ກັກຕົວໄວ້. ໃນວັນທີ່ 12 ສິງຫາ 1960, ກອງແລ ໄດ້ເອົາຍົນເຮລິໂຄບເຕີໄປຕອັນ"ເອົາຜູ້ນຳຝ່າຍລາວຄອມມຸຍນິສຕ໌ 5 ຄົນ ທີ່ແຫກຄຸກໄປຢູ່ບ້ານນາຍາງ ໄກ້ຯກາສີ ກັບມາຮ່ວມຣັຖບາລຂອງເຈົ້າສຸວັນນາພູມາ ທີ່ປະກອບຂຶ້ນໃໝ່ ແມ່ນຣັຖບາລ "ເປັນກາງ" ຄນະດັ່ງກ່າວມີຄື: ທ່ານໜູຮັກ ພູມສະຫວັນ, ທ່ານພູນ ສີປະເສີດ, ທ່ານ ສີຊະນະສີສານ, ທ່ານສິງກະໂປ ສີໂຄດຈຸນລະມາລີ, ແລະທ່ານພູມີ ວົງວິຈິດ. (ປຶ້ມບັນທຶກ ຂອງທ່ານພູມີ ວົງວິຈິດ ໜ້າ 143 ) ໃນເດືອນສິງຫາ ວັນທີ່ August 15, 1960, ນາຍພົນພູມີ ໜໍ່ສວັນໄດ້ປະກາສຕັ້ງຄນະປາບປະຕິວັຕຂຶ້ນຢູ່ສວັນນະເຂຕ ເພື່ອຕໍ່ຕ້ານຄນະຣັຖປະຫານຂອງກອງແລ ຢູ່ນະຄອນວຽງຈັນທນ໌. ໃນວັນທີ່ 16 ເດືອນສິງຫາ ( August) ປີ 1960, ຣ.ອ. ກອງແລໄດ້ມອບອຳນາຕໃຫ້ສະເດັດເຈົ້າສຸວັນນາພູມາ ປະກອບຣັຖບາລຄັ້ງທີ່ສາມ ເພື່ອຄວາມເປັນກາງ.

**ຣັຖບາລຊຸດທີ່ 12**

ຕອນແຣກ ພຣະມະຫາກະສັດ ບໍ່ຊົງຍອມລົງພະປາຣະມາພິໄທແຕ່ງຕັ້ງຣັຖບານເຈົ້າສຸວັນນາພູມາ ຊຶ່ງເປັນຣັຖບາລຂອງຄນະ ຣັຖປະຫາຣ. ເພາະສະນັ້ນ ເຈົ້າສຸວັນນາພູມາຈຶ່ງຕົກລົງປອງດອງ ກັບຄນະປາບຣັຖປະຫາຣ ຊຶ່ງແມ່ນ ນາຍພົລພູມີ ໜໍ່ສວັນ ເປັນຫົວໜ້າ ເພື່ອຈັດຕັ້ງຣັຖບາລປະສົມ ລະຫວ່າງ ຄນະຣັຖປະຫາຣ ແລະ ຄນະປາບ ຣັຖປະຫາຣ. ພະຣາຊອົງການ ເລກທີ່ 220 ລົງວັນທີ່ 31 ເດືອນສິງຫາ (August) ປີ 1960 ແຕ່ງຕັ້ງຣັຖບາລ ຊຸດນັ້ນຂຶ້ນ ອາຍຸປົການ ແຕ່ ວັນທີ່ 31 ສິງຫາເຖິງ ວັນທີ່ 9 ຕຸລາ (October) ປີ 1960.

- ເຈົ້າ ສຸວັນນາພູມາ          ນາຍົກຣັຖມົນຕຣີ, ຕ່າງປະເທສ, ປ້ອງກັນປະເທສ ແລະ ນັກລົບເກົ່າ
- ນາຍພົນ ພູມີ ໜໍ່ສວັນ          ຮອງນາຍົກ ແລະ ຣ.ມ.ຕ. ມະຫາດໄທ ທັມມະກາຣ( ບໍ່ຍອມເຂົ້າຮ່ວມ)
- ຫຍຸຍ ອາໄພ          ຣ.ມ.ຕ. ສຶກສາທິການ ແລະ ສິລະປະກອນ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ເຫຼື່ອມ ອິນສີຊຽງໃໝ່ ຣ.ມ.ຕ. ກະຊວງເສຖາກິດ
- ອິນແປງ ສຸຣິຍະໄທ ຣ.ມ.ຕ. ກະຊວງການຄັງ
- ອຸ ວໍຣະວົງ ຣ.ມ.ຕ. ໄປສະນີ, ໂທຣະເລກ ແລະ ໂທຣະຄົມມະນາຄົມ.
- ກີນິມ ພົນເສນາ ຣ.ມ.ຕ. ໂຄສະນາການ
- ຄຳສຸກ ແກ້ວລາ ຣ.ມ.ຕ. ກະຊວງສາທາຣະນະສຸກ
- ຕຸບີ ລີຟູງ ຣ.ມ.ຕ. ກະຊວງຍຸຕິທັມ
- ຄຳສີງ ໂງ່ນວໍຣະຣາຊ ຣ.ມ.ຕ. ໂຍທາທິການ ແລະ ຂົ່ນສົ່ງ
-ນາຍພົນ ອວັນ ຣາຕິກຸນ ຣ.ມ.ຕ. ຊ່ວຍວ່າການ ປ້ອງກັນປະເທສ ແລະ ນັກລົບເກົ່າ
- ຄຳກິ່ງ ສຸວັນລາສີ ຣ ມ ຕ ກະຊວງຕ່າງປະເທສ
- ເຈົ້າ ສີສຸມັງ ສີສເລີມສັກ ຣ ມ ຕ ກະຊວງປັບປຸງໝູ່ບ້ານ
- ເຈົ້າ ບູນອອ້ມ ນະຈຳປາສັກດິ໌ ຣ ມ ຕ ກະຊວງມະຫາດໄທ ແລະ ທັມມະການ

(ຄນະປາບ ຣັຖປະຫານ ບໍ່ຍອມເຂົ້າຮ່ວມ) ພົ້ນຕຳແໜ່ງ ຍ້ອນເຈົ້າບູນອູ້ມ ນະຈຳປາສັກດິ໌ ແລະນາຍພົນ ພູມີ ໜໍ່ສວັນ ປະຕິວັດ. ໃນວັນທີ່ 10 ເດືອນກັນຍາ (September) ປີ 1960, ນາຍພົນພູມີ ໜໍສວັນ ແລະ ສເດັຈເຈົ້າ ບູນອູ້ມ ນະຈຳປາສັກດ໌ ໄດ້ຣວບຣວມ ສ.ສ. ໄດ້ຫລາຍກວ່າເຄິ່ງ ແລ້ວໄດ້ ເປີດປະຊູມສະພາ ຂຶ້ນທີ່ສວັນນະເຂດ ໄດ້ລົງມະຕິ ລົ້ມ ຣັຖບາລເຈົ້າສຸວັນນະພູມາ. ໃນວັນທີ່ 9 ຕຸລາ ປີ 1960 ນາຍພົນ ກຸ ປະສິດ ອາໄພ ເປີດສາຕບຸກລຸກ ເພື່ອປົດປ່ອຍ ນະຄອນວຽງຈັນທນ໌ ແຕ່ບໍ່ສຳເຣັດ ເພາະມີທະຫາຣຄອມ ມຸຍນິສຕ໌ ປ້ອງກັນຢ່າງແຂງແຮງ. ເຈົ້າສຸວັນນະພູມາ ຕ້ອງໄດ້ບິນໜີໄປລີ້ໄພຍ໌ ຢູ່ພະນົມເປັນ ປະເທສຂ ເມນ ແລ້ວໄດ້ມອບອຳນາຕໃຫ້ ທ່ານກີນິມ ໂພນເສນາ ແລະ ທ່ານນາຍພົນ ສູນທອນ ປະທັມະວົງເປັນຜູ້ ເບິ່ງແທນ.

ໃນດ້ານທະຫານ ໃນຕົ້ນເດືອນກັນຍາ September 1960, ຣັຖບາລສະເດັຈເຈົ້າສຸວັນນາພູມາ ໄດ້ປະ ກາສຮ່ວມກັບຝ່າຍແນວລາວຮັກຊາຕ, ແລະໄດ້ມອບໃຫ້ ພັຄ ຄນະປະເທສລາວ ຕັ້ງສູນກາງພັຄ ຢູ່ຊຳ ເໜືອ ແຂວງຫົວພັນ. ໃນວັນທີ່ 13 ເດືອນຕຸລາ (October) ປີ 1960 ເປີດສະຖານທູຕ ຣັດເຊັຍ ຂຶ້ນທີ່ ນະຄອນວຽງຈັນທນ໌. ໃນວັນທີ່ 22 ເດືອນພຶສຈິກາ (November) ປີ 1960, ເຈົ້າສຸວັນນາພູມມາໄດ້ຂໍ ການຊ່ວຍເຫລືອທາງ ທະຫາຣແລະເສຖກິຈ ຈາກຣັຊເຊັຍ ໃຫ້ຣັຖບາລເປັນກາງ. ໃນວັນທີ່ 28 ເດືອນພຶ ສຈິກາ (November) ປີ 1960, ກອງທະຫາຣຂອງຄນະປະຕິວັຕສວັນນະເຂຕ ພາຍໃຕ້ການບັງຄັບ ບັນຊາຂອງທ່ານນາຍພົນພູມີ ໜໍສວັນ ໄດ້ບຸກໂຈມຕີ ກອງທະຫາຣດ່ານໜ້າ ຂອງ ຣ.ອ. ກອງແລ. ໃນວັນ ທີ່ 13-16 ເດືອນທັນວາ (December) ປີ 1960, ຄນະປາບຣັຖປະຫາຣສວັນະເຂຕ ໄດ້ບຸກໂຈມຕີ ປົດປ່ອຍເອົານະຄອນວຽງຈັນທນ໌ ໄດ້ສຳເຣັດ ແລະໄດ້ຈັດຕັ້ງຣັຖບາລຂຶ້ນໃໝ່. (ທ່ານພູມີ ວົງວິຈິດ ບັນທຶກ ໃນປຶ້ມຄວາມຊົງຈຳ ຂອງທ່ານ ວ່າ: “ບໍ່ຢາກໃຫ້ປະຊາຊົນ ແລະ ນະຄອນວຽງຈັນຖືກທຳລາຍ ຈຶ່ງຖອຍ ໄປຕຽມຕໍ່ສູ້ ຢູ່ທົ່ງໄຫຫີນ” )


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**<u>ຣັຖບາລຊຸດທີ່ 13 ຊຸດ ປາບ ຄນະຣັຖປະຫາຣ ກອງແລ</u>**

ຕາມພະຣາຊອົງການ ເລກທີ່ 283 ລົງວັນທີ່ 14 ທັນວາ (December) 1960 ອາຍຸປີການແຕ່ວັນທີ່ 13 ທັນວາ (December) 1960 ເຖິງວັນທີ່ 23 ເມສາ (March) 1962, ຣັຖບານຊຸດນີ້ແມ່ນ ຣັຖບາລ ປາບຄນະຣັຖປະຫາຣກອງແລ ໂດຍບໍ່ໄດ້ຜ່ານການໄວ້ວາງໃຈຈາກສະພາແຫ່ງຊາຕແຕ່ຢ່າງໃດ. ເມື່ອຄນະ ປາບຣັຖປະຫາຣ ຄອບຄູມ ວຽງຈັນຫນໍໄດ້ແລ້ວ ຈຶ່ງໄດ້ຜ່ານຄວາມໄວ້ວາງໃຈຈາກສະພາແຫ່ງຊາຕ ຕາມ ພະຣາຊອົງການ ທີ່ 1 ລົງວັນທີ່ 5 ມີນາ (March) 1961.

**ຣັຖບາລຊຸດນີ້ປະກອບດ້ວຍ**

- ເຈົ້າ ບູນອູ້ມ ນະຈຳປາສັກດິ໌ ນາຍົກຣັຖມົນຕຣີ ແລະ ກະຊວງການຕ່າງປະເທສ
- ນາຍພົນພູມີ ໜໍ່ສັວນ ຮອງນາຍົກ ແລະ ຣ.ມ.ຕ. ປ້ອງກັນປະເທສ, ນັກລົບເກົ່າ, ຮັກສາຄວາມໄພ໌ຍ ຂອງຊາຕ.
- ບົວວັນ ນໍຣະສິງ ຣ. ມ.ຕ ຍຸຕິທັມ, ຖແລງຂ່າວ ແລະ ໂຄສະນາການ
- ເຫຼື່ອມ ອິນສີຊຽງໃໝ່ ຣ. ມ.ຕ ກະຊວງມະຫາດໄທ
- ພວງເພດ ພານາເຣດ ຣ. ມ.ຕ ກະຊວງ ການຄັງ ແລະ ແຜ່ນຜັງ.
- ຕຸບີ ລີຟູງ ຣ. ມ.ຕ ກະຊວງສາທາຣະນະສຸກ ແລະ ປະຊາສົງເຄາະ
- ໂງ່ນ ຊະນະນິກອນ ຣ. ມ.ຕ ກະຊວງເສຖາກິດ
- ເຈົ້າ ບູນອອ້ມ ນະຈຳປາສັກດິ໌ ຣ. ມ.ຕ ກະຊວງທັມມະການ
- ສີສຸກ ນະຈຳປາສັກດິ໌ ຣ. ມ.ຕ ປະຈຳ ສຳນັກນາຍົກ ຣັຖມົນຕຣີ
- ຄຳພັນ ປັນຍາ ຣ. ມ.ຕ ໂຍທາ, ໄທຣະເລກ ແລະ ໄທຣະຄົມມະນາຄົມ
- ຫຍຸຍ ອາໄພ ຣ. ມ.ຕ ກະຊວງສຶກສາທິການ
- ເຈົ້າສອບ ໄຊຊະນະ ຣ. ມ.ຕ ຊ່ວຍວ່າການ ຕ່າງປະເທສ
- ບູນທົງ ວໍຣະວົງ ຣ. ມ ຕ ຊ່ວຍ ກະຊວງນັກລົບເກົ່າ
- ບຸນລັບ ຫຍຸຍວານິຊວົງ ຣ. ມ ຕ ຊ່ວຍ ກະຊວງເສຖາກິດ
- ພວງແກ້ວ ພານາເຣດ ຣ. ມ ຕ ຊ່ວຍ ກະຊວງໂຍທາທິການ

ພົ້ນຕຳແໜ່ງ ເນື່ອງຈາກ ລາວສາມຝ່າຍໄດ້ຕົກລົງຈັດຕັ້ງຣັຖບາລ ປະສົມ. ເຈົ້າບູນອູ້ມ ນະຈຳປາສັກດິ໌ ຕ້ອງລາອອກ ເພື່ອໃຫ້ມີການຕັ້ງຣັຖບາລ ປະສົມຊຸດຕໍ່ໄປ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມື່ອຄນະປາບຣັຖປະຫາຣ ຢຶດໄດ້ນະຄອນວຽງຈັນທນ໌ແລ້ວ, ກອງທະຫາຣ ພາຍໃຕ້ການບັງຄັບບັນຊາ ຂອງ ຣ.ອ. ກອງແລ, ໄດ້ແຕກອອກຈາກວຽງຈັນທນ໌ ໄປຕາມຖນົນເລຂທີ່ 13 ໄປສູ່ໂພນໂຮງ, ວັງວຽງ, ກາສີ, ສາລາພູຄູນ ມຸ້ງໜ້າໄປທາງທົ່ງໄຫຫີນ. ເຖິງເມືອງສຸ້ຍໃນວັນທີ່ 25 ທັນວາ ປີ 1960, ມີເຄື່ອງບິນຂອງ ຣັຊເຊັຍໄດ້ລຳລຽງອາຫານ, ອາວຸດ ຖິ້ມລົງໃຫ້ກອງທະຫານຣຂອງກອງແລ ຢ່າງເນື່ອງນິດ ເລີ່ມຕັ້ງແຕ່ ກາສີຈົນເຖິງເມືອງສຸ້ຍ. ເມື່ອ ຣ.ອ. ກອງແລ ໄດ້ທອັນໂຮມກຳລັງຢ່າງຮຽບຮ້ອຍແລ້ວ, ໂດຍ ການສນັບສນຸນຈາກ ກຳລັງຂອງ ຄອມມຸຍນິສຕ໌ ວຽດນາມເໜືອ ຈຶ່ງໄດ້ເຄື່ອນທີ່ໄປໂຈມຕີ ຝ່າຍຂວາ ທີ່ ບ້ານບານເມືອງຄຳ ແລະ ທົ່ງໄຫຫີນ.

ໃນວັນທີ່ 30 ເດືອນທັນວາ (December) ປີ 1960, ຊຶ່ງເວລານັ້ນແມ່ນ ພ.ຕ. ວ່າງປາວ ເປັນຜູ້ຮັກສາການປ້ອງກັນທົ່ງໄຫຫີນຮ່ວມກັນ ກັບກອງພັນທະຫາຣ ຣາບອາກາສ ຂອງນາຍພົນພູມີ ໜໍສວັນ ທີ່ທາກໍໄດ້ສິ່ງໄປຮອດໃໝ່ ໆ.

ໃນວັນທີ່ 31 ເດືອນທັນວາ (December) ປີ 1960, ທະຫາຣກອງແລ ປະສົມຄອມມຸຍນິສຕ໌ວຽດ ນາມເໜືອ ໄດ້ເຂົ້າຍຶດທົ່ງໄຫຫີນ ແລະເມືອງຊຽງຂວາງ ໄວ້ໄດ້ຢ່າງງ່າຍດາຍ. ໃນວັນທີ່ 11 ເດືອນ ກຸມພາ (February) ປີ 1961, ເຈົ້າສຸວັນນາພູມາ ໄດ້ບິນກັບປະເທສລາວ ໄດ້ໄປລົງຢູ່ຊຽງໄຂ, ແຂວງຊຽງຂວາງ ເພື່ອຮ່ວມມືກັບກອງແລ, ລາວ ຄ.ມ.ນ. ແລະ ວຽດນາມເໜືອ ຄ.ມ.ນ. ທີ່ທາກໍເຂົ້າຍຶດໄດ້ທົ່ງໄຫຫີນໃໝ່ໆ ຢູ່ແຂວງຊຽງຂວາງ ໄປເປັນທີ່ຕັ້ງຮຽບຮ້ອຍ.

ການຢຶດຄອງແຂວງຊຽງຂວາງ ຈາກກອງແລ ໄດ້ເຮັດໃຫ້ສຖານະການໃນແຂວງຊຽງຂວາງ ແລະແຂວງຫົວພັນ ໄດ້ປ່ຽນແປງໄປຢ່າງຮ້າຍແຮງ, ແລະກັນດານທີ່ສຸດ. ປະຊາຊົນແຕ່ລະແຂວງໄດ້ ພັດພາກຈາກກັນ, ເປັນສັດຕຣູຕໍ່ກັນ ດ້ວຍຄວາມຈຳເປັນ ມາຈາກສາມຝ່າຍຕໍ່ສູ້ກັນຄື: ກາງ, ຂວາ ແລະຊ້າຍ ຜົລສຸດທ້າຍ ຊ້າຍຕໍ່ສູ້ ກາງ, ແມ່ນເອົາແກວ ຄ.ມ.ນ. ມາຂ້າປະຊາຊົນ ລາວ. ເໜືອໄປກ່ວານີ້ ຍັງແບ່ງ ເປັນເຂຕອີກຄື: ເຂຕຂອງຝ່າຍຊ້າຍ, ເຂຕຂອງ ຝ່າຍກາງ ແລະ ເຂຕຂອງຝ່າຍຂວາ. ໄດ້ເຮັດໃຫ້ຄົນລາວ ໝົດສິດເສຣີພາບ ທຸກຢ່າງຍ້ອນ ຄວາມບໍ່ໄວ້ໃຈ, ບໍ່ເຊື່ອໃຈຊຶ່ງກັນແລະກັນ ແມ່ນແກວ ຄ.ມ.ນ. ມາຍຸ້ແຫຍ່ ເຮັດໃຫ້ລາວແຕກແຍກກັນ.

ໃນວັນທີ່ 24 ເດືອນ ກຸມພາ (February) ປີ 1961, ເຈົ້າສຸວັນນາພູມາ ໄດ້ບິນກັບໄປປະເທສ ຂເມນ, ຍ້ອນເຫັນວ່າ ສຖານະການ ຍັງຄັບຂັນ ບໍ່ປອດໄພ໌ຍ ເພາະ ການສູ້ລົບກັນໃນຣະຫວ່າງ ທະຫາຣຝ່າຍຂວາ ແລະຝ່າຍເປັນກາງ ປະສົມຄນະປະເທສລາວ ແລະ ແກວ ຄ.ມ.ນ. ຍັງດຳເນີນຢູ່ທຸກຈຸດໃນແຂວງຊຽງຂວາງ ແລະຫົວພັນ. ໃນວັນທີ່ 8 ເດືອນ ພຶສພາ (May) ປີ 1961, ຄນະກັມມະການ ກວດກາສາກົນ **ຊຶ່ງ** ປະກອບດ້ວຍ ຜູ້ຕາງໜ້າຂອງ ປະເທສ ອິນເດັຍ, ການາດາ ແລະ ໂປໂລຍ ໄດ້ກັບມາປະຕິບັດງານ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ການກວດກາ ຢູ່ໃນປະເທສລາວອີກ. ໃນວັນທີ່ 11 ເດືອນພຶດສພາ (May) ປີ 1961, ໄດ້ປະກາສໃຫ້ມີການຢຸດຍີງ.

ໃນວັນທີ່ 16 ເດືອນພຶດສພາ (May) ປີ 1961, ໄດ້ເປີດການເຈຣະຈາ ຢູ່ທີ່ ເຈນີວາ ປະເທສ ສວິສເຊີແລນ. ໃນວັນທີ່ 22 ເດືອນ ມີຖຸນາ (June) ປີ 1961, ສາມເຈົ້າລາວ ພົບປະກັນອີກຢູ່ທີ່ ຊູຣິດ, ປະເທສ ສວິສເຊີແລນ. ການຕົກລົງກັນໃນຣະຫວ່າງສາມສເດັຈ ລາວຄັ້ງນີ້ ຊື່ງມີເຈົ້າສຸວັນນາພູມາ ຝ່າຍກາງ, ເຈົ້າບູນອູ້ມ ນະຈຳປາສັກດິ໌ ຝ່າຍຂວາ, ເຈົ້າສຸພານຸວົງສ໌ ຝ່າຍຊ້າຍ. ໄດ້ປຶກສາຫາລືກັນ ເພື່ອປະກອບຣັຖບານປະສົມສາມຝ່າຍ ຢູ່ໃນພຣະຣາຊອານາຈັກລາວ ຈົນເຖີງ ວັນທີ່ 12 ເດືອນມີຖຸນາ (June) ປີ 1962 ໂດຽພົບກັນທີ່ຫີນເຫີບ, ທົ່ງໄຫຫີນ ແລະຊູຣິດ, ແຕ່ກໍຍັງຕົກລົງຫັງງກັນບໍ່ທັນໄດ້, ເພາະສະນັ້ນ ກອງທະຫາຣ ວຽດນາມຄອມມຸຍນິສຕ໌ ປະສົມກັບກຳລັງຝ່າຍປະເທສລາວ ໄດ້ບຸກໂຈມຕີແຂວງຫລວງນ້ຳທາ ຢ່າງຮູນແຮງ.

ເດືອນ ພຶສພາ (May) 1962, ສະຫາຣັຖ ຈື່ງໄດ້ສັ່ງກອງທະຫາຣຂອງຕົນໄປຕັ້ງ ຢູ່ໃນຣາຊອານາຈັກໄທຍ, ເພື່ອປ້ອງກັນການລຸກລານຂອງ ຄອມມຸຍນິສຕ໌ ໃນເອເຊັຍຕາວັນອອກສ່ຽງໃຕ້. ໃນວັນທີ່ 23 ເດືອນ ມີຖຸນາ (June) 1962, ແມ່ນການປະກອບຣັຖບາລປະສົມຊົ່ວຄາວແຫ່ງຊາຕ ຄັ້ງທີ່ສອງ. ໃນວັນທີ່ 23 ເດືອນ ກໍຣະກະດາ (July) ປີ 1962 ມີຜູ້ຕາງໜ້າຂອງລາວສາມຝ່າຍ ເຂົ້າຮ່ວມເຈຣະຈາຢູ່ເຊີນີວາ, ປະເທສສວິສເຊີແລນ, ເພື່ອຮັບລອງ "ຄວາມເປັນກາງ ຂອງລາວ." ໂດຽມີ ພນະທ່ານ ຜຸຍ ຊະນະນິກອນ ເປັນຜູ້ຕາງໜ້າ ຂອງສເດັຈເຈົ້າບູນອູ້ມ ນະຈຳປາສັກດິ໌, ທ່ານກີນິມ ໂພນເສນາ ເປັນຜູ້ຕາງໜ້າຂອງ ສເດັຈເຈົ້າສຸວັນນະພູມາ ແລະ ທ່ານພູມີ ວົງວິຈິດ ເປັນຜູ້ຕາງໜ້າ ຂອງສເດັຈເຈົ້າ ສຸພານຸວົງສ໌. ກອງປະຊຸມດັ່ງກ່າວໄດ້ບົ່ງໄວ້ວ່າ: ໃຫ້ທະຫາຣຕ່າງດ້າວຖອນອອກໄປຈາກປະເທສລາວ ຢ່າງສິ້ນເຊີງ. ແຕ່ແກວ ຄ.ມ.ນ. ໄດ້ເສີມກຳລັງເຂົ້າມາປະເທສລາວ ຢ່າງບໍ່ມີການຢຸດຢັ້ງ.

**<u>ຣັຖບານຊຸດທີ່ 14</u>**

ຣັຖບາລຊຸດນີ້ ໄດ້ມີການປັບປູງ 5 ຄັ້ງ ດັ່ງຕໍ່ໄປນີ້ ຕາມພະຣາຊອົງການເລກທີ່ 219 ລົງວັນທີ່ 23 ເດືອນມີນາ (March) ປີ 1962 (ພ.ສ. 2505) ຣັຖບາລປະສົມສາມຝ່າຍ ແລະ ຕາມຂໍ້ຕົກລົງກັນຢູ່ປະຊຸມນາໆຊາຕ ກ່ຽວກັບບັນຫາລາວທີ່ເຊີແນວ. ອາຍຸປີການແຕ່ ວັນທີ່ 23 ເດືອນມີນາ (March) ປີ 1962 ເຖີງ ເດືອນ ມີຖຸນາ (June ) 1974.

- ເຈົ້າສຸວັນນະພູມາ — ນາຍົກຣັຖມົນຕຣີແລະຣ.ມ.ຕ. ກະຊວງປ້ອງກັນປະເທສ, ນັກລົບເກົ່າ, ປັບປູງໝູ່ບ້ານ
- ເຈົ້າ ສຸພານຸວົງສ໌ — ຮອງນາຍົກ, ຣ.ມ.ຕ. ເສຖາກິດ ແລະ ແຜນຜັງ
- ນາຍພົນ ພູມີ ໜໍ່ສວັນ — ຮອງນາຍົກ, ຣ.ມ.ຕ. ກະຊວງການຄັງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ເພັງ ພົງສວັນ ຣ.ມ.ຕ. ມະຫາດໄທ ແລະ ປະຊາສົງເຄາະ
- ພູມີ ວົງວິຈິດ ຣ.ມ.ຕ. ຖແລງຂ່າວ, ໂຄສະນາ ແລະ ທອ້ງທ່ຽວ
- ເຫຼື່ອມ ອິນສີຊຽງໃໝ່ ຣ.ມ.ຕ. ສຶກສາ, ສິລປະກອນ ແລະ ຍຸວະຊົນ
- ບູນທັນ ຊົງວິໄລ ຣ.ມ.ຕ. ກະຊວງທັມມະກາຣ
- ເຈົ້າ ສີສຸມັງ ສີສເລີມສັກ ຣ.ມ.ຕ. ກະຊວງໄປສະນີ ແລະ ໂທຣະຄົມມະນາຄົມ
- ໂງ່ນ ຊະນະນິກອນ ຣ.ມ.ຕ. ກະຊວງໂຍທາທິການ ແລະ ຂົ່ນສົ່ງ
- ຄໍາສຸກ ແກ້ວລາ ຣ.ມ.ຕ. ກະຊວງ ສາທະຣະນະສຸກ
- ຂຸນອ່ອນ ວໍຣະວົງ ຣ.ມ.ຕ. ກະຊວງ ຍຸຕິທັມ
- ກິນິມ ພົນເສນາ ຣ.ມ.ຕ. ກະຊວງ ການຕ່າງປະເທສ
- ແກ້ວ ວິພະກອນ ຣ.ມ.ຕ. ຊ່ວຍ ກະຊວງ ປະຊາສົງເຄາະ
- ບຸນທົງ ວໍຣະວົງ ຣ.ມ.ຕ. ຊ່ວຍ ກະຊວງ ສິລປະກອນ, ກິລາ ແລະ ຍຸວະຊົນ
- ຄໍາເຝື່ອນ ຕຸນາຣົມ ຣ.ມ.ຕ. ຊ່ວຍ ກະຊວງ ເສຖາກິດ ແລະ ແຜ່ນຜັງ
- ເຈົ້າ ສຸກວົງສັກ ຣ.ມ.ຕ. ຊ່ວຍ ກະຊວງ ໂຍທາທິການແລະ ຂົ່ນສົ່ງ
- ນາຍພົນ ເຮືອນ ມົງຄົນວິໄລ ຣ.ມ.ຕ. ຊ່ວຍ ກະຊວງ ນັກລົບເກົ່າ
- ຄໍາເພັງ ບູບຜາ ຣ ມ ຕ ຊ່ວຍ ກະຊວງ ປັບປູງໝູ່ບ້ານ



*<u>ຮູບທີ່ 153</u>. ສາມສເດັຈຂອງລາວ ຈາກຊ້າຍຫາຂວາ ເຈົ້າບູນອູ້ມ ນະຈໍາປາສັກ, ເຈົ້າສຸວັນນາພູມາ ແລະ ເຈົ້າສຸພານຸວົງສ໌. ໃນປີ 1962. ສາມເຈົ້າລາວ ໄດ້ແບ່ງລາວເປັນສາມຝ່າຍ ຄື: ຂວ່າ, ກາງແລະ ຊ້າຍ ຕໍ່ສູ້ກັນເອງ. ສຸດທ້າຍເມືອງລາວຕົກໃຫ້ວຽດນາມເໜືອ ໄດ້ເຮັດໃຫ້ເຊື້ອເຈົ້າຂອງລາວສິ້ນສຸດລົງໃນປີ 1975.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 154. ການເຊັນສັນຍາ ລະຫວ່າງ ສາມເຈົ້າລາວ ໃນເດືອນ ມິຖຸນາ ວັນທີ່ June 22, 1961  ຮູບຈາກຊ້າຍໄປຫາຂວາ ສເດັຈເຈົ້າບູນອູ້ມ, ທ່ານພູມີວົງວິຈິດ, ເຈົ້າສຸວັນນະພູມມາ ແລະ ເຈົ້າສຸພານຸວົງສ໌.*

ໃນເດືອນພືສະຈິກາ (November) 1962, ກອງທະຫານຝ່າຍເປັນກາງ ທີ່ຢູ່ທົ່ງໄຫຫີນເກີດຂັດແຍ້ງກັນເອງ ໃນລະຫວ່າງ ກາງ ຣ. ອ. ກອງແລ ແລະ ກາງ ນາຍເດືອນ ສຸນນາຣາດ, ໄດ້ແຍກເປັນສອງກາງ. (ບົດຂຽນໃນປື້ມປວັດສາຕ ອານາຈັກພວນ ຂອງເຈົ້າຄຳຫລວງ ໜໍ່ຄຳ ຂຽນຢູ່ໜ້າ 232 ລະຫວ່າງກາງຂອງໜ້າເຈັ້ຍວ່າ: "ນາຍພົນກອງແລ ເລີ່ມເຫັນຕີນງູ ແລະງູກໍເລີ່ມເຫັນຕີນໄກ່." ດັ່ງນີ້ ສຸພານຸວົງສ໌ ຈື່ງເລືອກເອົາ ພ.ອ. ເດືອນ ສຸນນາຣາດ ແທນ ກອງແລ. ສຸດທ້າຍ ກອງທັພເປັນກາງ ກໍແຕກເປັນປ່ຽງ ໆ).

ໃນປີ 1962-1963, ທີ່ຕັ້ງກອງທະຫານຂອງນາຍພົນວ່າງປາວ ຢູ່ປ່າດົງ (LS05) ຖືກທະຫານປະເທສລາວ ປະສົມວຽດນາມເໜືອ ບຸກໂຈມຕີໜັກ. ໃນປີ 1963, ທະຫານຄນະປະເທສລາວ ປະສົມທະຫານວຽດນາມເໜືອໄດ້ບຸກໂຈມຕີ ທະຫານຝ່າຍເປັນກາງຂອງ ຣ.ອ. ກອງແລ ແຕກອອກຈາກທົ່ງໄຫຫີນໄປຕັ້ງຢູ່ເມືອງພົ້ນ. ໃນວັນທີ່ 12 ເດືອນ ກຸມພາ (February) ປີ 1963, ພ.ອ. ເກສນາ ວົງສຸວັນ ຫົວໜ້າເສນາທິການຂອງກອງແລ ຖືກລອບສັງຫານ ທີ່ທົ່ງໄຫຫີນ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*<u>ຮູບທີ່ 155</u>. ຣ.ອ ກອງແລ ກຳລັງກ່າວຄຳປາໄສ້ຍເມື່ອປະຕິວັດສຳເຣັດ ວັນທີ່ 9 ສິງຫາ 1960 ຢູ່ນະຄອນວຽງຈັນທນ໌ນາຍທະຫານຜູ້ທີ່ ສາມ ຈາກມືຂວານັບຈາກທ່ານກອງແລ ມາ ແມ່ນ ນາຍ ພ.ອ. ເກດສນາ ວົງສຸວັນ ຫົວໜ້າເສນາທິການ ແລະເປັນນາຍທະຫານມືຂວາຂອງກອງແລ ຖືກລອບສັງຫານຕາຍຢູ່ທົ່ງໄຫຫີນໃນປີ 1964 ຈຶ່ງເຮັດໃຫ້ກາງແຕກແຍກກັນ ເປັນສອງກາງ ຄື ກາງອ່ຽງຊ້າຍ ບັງຄັບໂດຽ ພ.ອ ທ້າວເດືອນ ສຸນານຣາດແລະ ກາງເດີມຂອງ ຣ.ອ ກອງແລ..*

ໃນວັນທີ່ 1 ເດືອນເມສາ (April) ປີ 1964, (ພ.ສ. 2507) ພນະທ່ານກີນີມ ພົນເສນາ ຣັຖມົນຕຣີກະຊວງຕ່າງປະເທສຂອງຣັຖບາລປະສົມສາມຝ່າຍ, ຜູ້ເປັນຫົວໜ້າເຊັນ ສັນຍາ ຢູ່ເຈນີວາ ປີ 1962 ຕາງໜ້າພັຄເປັນກາງຂອງເຈົ້າສຸວັນນາພູມາ, ຖືກລອບສັງຫາຣຕາຍຈາກສິບໂທໄຊກອງທະຫາຣ ຍາມປະຈຳບ້ານຢູ່ທີ່ພັກ ຄູ້ມທາຕດຳ ນະຄອນວຽງຈັນທນ໌ ຕອນພນະທ່ານກັບມາຈາກກິນລ້ຽງ ງານພະຣາຊທານລ້ຽງອາຫາຣຄ່ຳ ປີໃໝ່ລາວ ຢູ່ຫໍຄຳ. ຣັຖບາລຈຶ່ງແຕ່ງຕັ້ງ ຄຳສຸກ ແກ້ວລາ ເປັນ ຣ.ມ.ຕ. ກະຊວງຕ່າງປະເທສ ແທນ. ໃນວັນທີ່ 12 ເດືອນ ເມສາ (April) ປີ 1964, ຫົວໜ້າຕຳຣວດ ທ່ານຄັນທິ ສີພັນທອງ ຝ່າຍກາງ ນິຍົມຝ່າຍຊ້າຍ ຖືກລອບສັງຫາຣຕາຍຢູ່ທີ່ບ້ານ ພັກຄູ້ມສາຍລົມນະຄອນວຽງຈັນທນ໌ ພາໃຫ້ກຳລັງຝ່າຍກາງ ຍິ່ງເກີດບັນຫາໜັກຂຶ້ນ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບ #156. ນາຍພົນກອງແລ ຖ່າຍຮູບກັບ ນາຍພົນອ່າງປາວ ໃນປີ 1967*

ໃນປີ 1965, ທະຫານຂອງກອງແລ ໄດ້ແຕກອອກຈາກເມືອງພັ້ນ ໄປຕັ້ງຢູ່ເມືອງສຸຍ, ແຂວງຊຽງຂວາງ. ໃນປີ 1967, ແຕກອອກຈາກເມືອງສຸ້ຍ ແລ້ວໄປຕັ້ງຢູ່ ກາສີ ແຂວງວຽງຈັນທນ໌, ສຸດທ້າຍບໍ່ມີບ່ອນຢູ່, ກອງແລ ໄດ້ໜີອອກຈາກເມືອງລາວ ໄປເປັນອົພຍົບຢູ່ນອກປະເທສ ພາໃຫ້ຝ່າຍເປັນກາງແຕກ ກະຈັດກະຈາຍ, ສວ່ນໜຶ່ງຕັ້ງຢູ່ວັງວຽງ, ສ່ວນໜຶ່ງໄດ້ເຂົ້າໄປຢູ່ໃນ ນະຄອນວຽງຈັນທນ໌. ຈາກນັ້ນກຳລັງຂອງຝ່າຍເປັນກາງ ກໍບໍ່ເຫລືອ. ການຄາດຕະກັມຂອງ ທ່ານກີນິມ ພົນເສນາ ໄດ້ເຮັດໃຫ້ ຣັຖບາລ ປະສົມສາມຝ່າຍແຕກແຍກກັນ, ຄນະຣັຖມົນຕຣີ ຝ່າຍປະເທສລາວທັງໝົດ ກໍໄດ້ຖອນຕົວ ກັບໄປຢູ່ຊຳເໜືອ. ເຈົ້າສຸວັນນາພູມາ ຈຳເປັນຕ້ອງໄດ້ປັບປຸງຄນະຣັຖບາລ <u>05 ຄັ້ງ</u> ດັ່ງຕໍ່ໄປນີ້:

**ເຈົ້າ ສຸວັນນາພູມາ ປັບປຸງ ຄນະຣັຖບາລ ຄັ້ງທີ່ 1**

ໃນວັນທີ່ 22 ເດືອນພຶສພາ (May) ປີ1963 ( ພ.ສ. 2507), ຕາມຄວາມຕ້ອງການຂອງ ຄນະປະຕິວັດ ກຸປະສິດ ອາໄພຍ ດັ່ງນີ້:

- ກ- ໃຫ້ ເພັງ ພົງສວັນ ຮັກສາການແທນ ກີນິມ ພົນເສນາ
- ຂ- ໃຫ້ນາຍພົນ ສຸກັນວິໄລທົງ (ຄົນໃໝ່) ເປັນ ຣ.ມ.ຕ. ຊ່ວຍວ່າການປ້ອງກັນປະເທດ ແທນນາຍພົນເຮືອນ ມົງຄົນວິໄລ
- ຄ- ໃຫ້ ອຸທອງ ສຸວັນນະວົງ (ຄົນໃໝ່) ເປັນ ຣ.ມ.ຕ. ສາທາຣະນະສຸກ ແທນ ຄຳສຸກ ແກ້ວລາ
- ງ- ໃຫ້ ເຈົ້າ ສີສຸມັງ ສີສເລີມສັກ ວ່າການ ແທນ ພູມີ ວົງວິຈິດ
- ຈ- ໃຫ້ໂງ່ນ ຊະນະນິກອນ ວ່າການແທນ ເຈົ້າ ສຸພານຸວົງສ໌ ຮອງນາຍົກຣັຖມົນຕຣີ ໄວ້ເປົ່າຫວ່າງ.

**ສຸວັນນາພູມາ ປັບປຸງຣັຖບາລ ຄັ້ງທີ່ 2**

- ກ- ໃຫ້ ບົວວັນ ນໍຣະສິງ ເປັນ ຣ.ມ.ຕ. ຍຸຕິທັມ ແທນ ຊຸນອ່ອນ ວໍຣະວົງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂ- ໃຫ້ ອຸນເຮືອນ ນໍຣະສິງ ເປັນ ຣ.ມ.ຕ. ທັມມະກາຣ ແທນ ບຸນທັນ

ຄ- ໃຫ້ ໄຕແກ້ວ ຫລວງໂຄດເປັນ ຣ.ມ.ຕ. ສຶກສາ, ສິລປະກອນ, ກິລາ ແລະ ຍຸວະຊົນແທນ ບຸນທົງ ວໍຣະວົງ.

ງ- ໃຫ້ ສີສຸກ ນະຈໍາປາສັກ ເປັນ ຣ.ມ.ຕ. ການຄັງ ແທນ ພວງເພດ ພານາເຣດ.

ໃນວັນທີ່ 16 ເດືອນ ເມສາ (April) ປີ 1964, ທັງສາມຝ່າຍເລີ່ມ ຫາລືກັນ ເພື່ອຈັດຕັ້ງ ຣັຖບາລ ຮ່ວມກັນອີກ.

ໃນວັນທີ່ 19 ເດືອນເມສາ (April) ປີ 1964, ນາຍພົນກຸປະສິດອາໄພຍ໌ ແລະ ນາຍພົນ ສີໂຫ ລານ ພຸທະກູລ ໄດ້ທໍາການປະຕິວັດຕໍ່ຕ້ານ ຣັຖບາລຂອງເຈົ້າສຸວັນນະພູມາ ນາຍົກຣັຖມົນຕຣີ ຂອງຣັຖບາລ ປະສົມຊົ່ວຄາວແຫ່ງຊາຕ ໃຫ້ແກ້ໄຂສະພາບພາວະເສຖາກິຈ ແລະ ປັບປູງທົ່ວໄປພາຍໃນປະເທສ. ການກະທໍາດັ່ງກ່າວ ບໍ່ໄດ້ເກີດຜົລພໍເທົ່າໃດ ຍ້ອນຕ່າງປະເທສ ຍັງຮັກສາການເມືອງ “ເປັນກາງ“ ຂອງສເດັຈ ເຈົ້າສຸວັນນາພູມາ ເປັນຂໍ້ອ້າງ, ຈຶ່ງມີການບີບບັງຄັບຈາກທູຕນາໆຊາຕປະຈໍາລາວ ໃຫ້ຄນະປະຕິວັຕ ມອບອໍານາດຄືນໃຫ້ຣັຖບາລເຈົ້າສຸວັນນາພູມາ. ດັ່ງນັ້ນ ໃນວັນທີ່ 23 ເດືອນເມສາ (April) ປີ1964, ຄນະປະຕິວັດໄດ້ມອບອໍານາຕຄືນໃຫ້ ຣັຖບາລເຈົ້າສຸວັນນາພູມາ ເພື່ອດໍາຣົງຕໍາແໜ່ງນາຍົກຣັຖມົນຕຣີ ຕໍ່ໄປ.

ໃນຕົ້ນເດືອນມິຖຸນາ (June) ປີ 1964, ຣັຖບາລວຽງຈັນທນ໌ ໄດ້ສັ່ງໃຫ້ຝູງບິນ ເຕ-28 (T-28) ລາວເຂົ້າໄປຖິ້ມລະເບີດໃສ່ກອງບັນຊາການ ຂອງຄນະປະເທສລາວ, ແລະ ທະຫາຣວຽດນາມເໜືອ ທີ່ຢູ່ໃນບໍຣິເວັນເຂຕທົ່ງໄຫຫີນ, ແຂວງຊຽງຂວາງ ຢ່າງໜັກ. ໃນເດືອນກັນຍາ (September) 1964, ລາວສາມຝ່າຍໄດ້ເປີດການເຈຣະຈາຂຶ້ນໃໝ່ ທີ່ປາຣີ, ແຕ່ບໍ່ໄດ້ຜົລ.

ໃນວັນທີ່ 5 ເດືອນ ກຸມພາ (February) ປີ 1965, ນາຍພົນກູ້ປະສິດ ອາໄພຍ໌ ພ້ອມດ້ວຍນາຍທະຫາຣຝ່າຍຂວາ ໄດ້ທໍາການປະຕິວັດຂັບໄລ່ນາຍພົນພູມີ ໜໍສວັນ, ຮອງນາຍົກຣັຖມົນຕຣີຣັຖບາລປະສົມສາມຝ່າຍ, ນາຍພົນ ສີໂຫ ລານພຸທະກູລ ອະທິບໍດີກຣົມປະສາງານ ແຫ່ງຊາຕ ແລະ ນາຍພົນ ທ້າວມາ ຜ.ບ. ກອງທັພອາກາສລາວ ຂ້າມໄປຝັ່ງ ປະເທສໄທຍ໌ ໄປຂໍລີ້ໄພຍ໌ ທາງການເມືອງ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



Center: RLAF commander Thao Ma with U.S. Ambassador William Sullivan, 1965. (Robert Tyrrell)

*<u>ຮູບທີ່ 157</u>. ນາຍພົນ ທ້າວມາ ແລະ ເອກອັຄະຣາຊທູຕ ສະຫະຣັຖ ທ່ານ ວິລຽມສຸລິວັນ.*

ໃນວັນທີ່ 17 ເດືອນເມສາ (April) ປີ 1966, ນາຍພົນ ສີໂຫ ໄດ້ໄປພົບ ຄູບາທີ່ປະເທສໄທ ໄດ້ຂອງສັກສິດປ້ອງກັນ ສິ່ງຊົ່ວຮ້າຍແລ້ວ ກໍໄດ້ເຂົ້າມອບຕົວ ກັບອຳນາດການປົກຄອງ ຢູ່ທີ່ປາກເຊ ໄດ້ຖືກຄຸມຂັງ ເອົາໄປເຂົ້າຄຸກ ຢູ່ພູເຂົາຄວາຍ ແລ້ວໄດ້ຖືກຍິງຕາຍ ໃນເວລາລັກຕົນໜີ ໃນວັນທີ່ 4 ກັນຍາ (September) ປີ 1966, ບໍ່ມີຜູ້ໃດ ອາໄລ ທ່ານເລີຍ.

ໃນເດືອນຕຸລາ (October) ປີ 1973, ນາຍພົນທ້າວມາ, (ອາດີດແມ່ທັພອາກາສ ກອງທັພແຫ່ງຊາຕລາວທີ່ ໄດ້ລີ້ໄພ້ຍການເມືອງຢູປະເທສໄທ໌ຍ) ໄດ້ກັບຄືນມາ ທຳການປະຕິວັດ ໂດຍໄດ້ໃຊ້ເຄື່ອງບິນເຕ 28 (T28) ຢູ່ໃນສະໜາມບິນວັດໄຕ ໄປຖີ້ມລະເບີດໃສ່ຄ້າຍຈີໄນໂມ້ ແລະ ຄ້າຍໂພນເຄັງ ເພື່ອລ້າງແຄ້ນ ນາຍພົນ ກຸປະສິດ ອາໄພ້ຍ ແຕ່ທ່ານໜີລອດໄປໄດ້ຢ່າງປອດໄພ້ຍ. ຫລັງຈາກຖີ້ມລະເບີດທ່ຽວແຣກ ນາຍພົນ ທ້າວມາ ໄດ້ບິນກັບໄປສະນາມບິນວັດໄຕ ເພື່ອເຕີມລະເບີດມາຖີ້ມອີກ ແຕ່ໂຊກບໍ່ເຂົ້າຂ້າງ ລໍ້ເຄື່ອງບິນບໍ່ເປີດ ຈຶ່ງໄດ້ລົງແບບສຸກເສີນ ເຮັດໃຫ້ຍົນປີ້ນຂວ້ມ ນາຍພົນທ້າວມາ ຖືກບາດເຈັບນັກ ແລ້ວຖືກຈັບນຳຕົວໄປໃຫ້ ນາຍພົນກຸປະສິດ ທ່ານໄດ້ຍິງຖີ້ມກັບບອ່ນ ຕໍ່ໜ້າປະຊາຊົນຫລາຍຄົນ.
ໃນປີ 1966 ທ່ານລີເຕັກ ຮຽນຈົບໂຮງຮຽນກົດໝາຍ ມາຈາກ ປະເທສຝຣັ່ງເສສ. ທ່ານນາຍພົນວ່າງປາວມີຄວາມ ຕ້ອງການນັກຊ່ຽວຊານທີ່ມີຄວາມຮູ້ ໄດ້ຜ່ານການສຶກສາໄປຊ່ວຍ ທ່ານນາຍພົນວ່າງປາວ ຈຶ່ງໄດ້



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຊີນທ່ານລີເຕັກໄປຊ່ວຍ ນຳພາຊົນຊົນເຜົ່າລາວສູງ ດ້ານການປົກຄອງ ແລະ ການໃຊ້ກົດໝາຍ. ທ່ານ ລີເຕັກ ໄດ້ຂຶ້ນໄປລ່ອງແຈ້ງ ເພື່ອຮ່ວມວຽກກັບທ່ານນາຍພົນ ວ່າງປາວ ແຕ່ຜູ້ກ່ຽວໄດ້ກັບໄປທຳງານ ຢູ່ກະຊວງມະຫາດໄທ ໃນນະຄອນວຽງຈັນທນ໌ ເພາະວ່າທ່ານ ອາດບໍ່ຮູ້ປັບຕົວເຮັດວຽກນຳ ຝ່າຍທະຫານ ແລະ ປະຊາຊົນເຜົ່າມົ້ງ ຫລື ອາດມີແນວຄິດແຕກຕ່າງ. ສຸດທ້າຍທ່ານ ລີເຕັກໄດ້ຖືກຈັບໄປຄູມຂັງ ຢູ່ທີ່ເມືອງວຽງໄຊ, ແຂວງຫົວພັນ ໃນປີ 1975, ແລະ ໄດ້ຖືກປະຫານຊີວິດໃນບໍ່ດົນຕໍ່ມາ. ໃນເວລາປະຈຳການ ຢູ່ນະຄອນວຽງຈັນທນ໌ ທ່ານລີເຕັກ ແລະ ທ່ານ ຢາງດາວ ມີບັນຫາຫລາຍຢ່າງ ທັງສອງ ມີການສຶກສາສູ່ງ ແຕ່ຂາດຄວາມຮ່ວມມື ແລະ ຄວາມເຂົ້າໃຈກັນ. ລີເຕັກປະຈຳຢູ່ໃນວົງການຣັຖບາລຫລາຍປີກວ່າ ຢາງດາວ ເພາະແມ່ນນາຍພົນ ວ່າງປາວ ໄດ້ເລືອກ ຢາງດາວ ຜູ້ຫາກໍຈົບການສຶກສາ ມາໃໝ່ໆ ໃນປີ 1973 ໄປຮ່ວມ ຄນະຣັຖມົນຕຣີ ປະສົມການເມືອງ ສາມຝ່າຍ.

**ເຈົ້າສຸວັນນະພູມາ ປັບປູງ ຄັ້ງທີ່ 3**

ໃນວັນທີ່ 10 ມີນາ 1965 (ພ.ສ. 2508) ດັ່ງນີ້:

-ໃຫ້ ເຫລື່ອມອິນສີຊຽງໃໝ່ເປັນຮອງນາຍົກຣັຖມົນຕຣີ ແທນ ນ.ພ. ພູມີ ໜໍ່ສວັນ ຊຶ່ງໜີໄປລີ້ໄພທີ່ເມືອງໄທ

-ໃຫ້ ສີສຸການະຈຳປາສັກດິ໌ເປັນ ຣ.ມ.ຕ. ກະຊວງຄັງ ແທນ ນ.ພ ພູມີ ໜໍ່ສວັນ

-ໃຫ້ ອູ່ນເຮືອນ ນໍຣະສິງເປັນ ຣ.ມ.ຕ. ກະຊວງຍຸຕິທັມແທນ ບົວວັນຣ ນໍຣະສິງ

-ເຈົ້າ ສຸວັນນະພູມາ ເອົາຕຳແໜ່ງ ຣ.ມ.ຕ. ກະຊວງຕ່າງປະເທສຈາກ ເພັງພົງສວັນ

**ເຈົ້າສຸວັນນະພູມາປັບປູງ ຄັ້ງທີ່ 4**

ໃນວັນທີ່ 6 ກັນຍາ ປີ 1965 (ພ.ສ. 2058 )ຕາມຄຳສເນີຂອງຜູ້ແທນຣາຊດອນ

-ໃຫ້ອິນແປງສຸຣິຍະໄທ (ອາດີດຮອງປະທານສະພາຜູ້ແທນ) ເປັນ ຣ.ມ.ຕ. ກະຊວງຍຸຕິທັມ ແທນອູ່ນເຮືອນ ນໍຣະສິງ

-ໃຫ້ເຈົ້າບູນອອ້ມ ນະຈຳປາສັກດິ໌ເປັນ ຣ.ມ.ຕ. ກະຊວງທັມມະການແທນ ອູ່ນເຮືອນ ນໍຣະສິງ

-ໃຫ້ ໄຕ ແກ້ວຫລວງໂຄດ ເປັນ ຣ.ມ.ຕ. ຊ່ວຍ ກະຊວງສຶກສາທິການ, ຍຸວະຊົນ, ສາທະຣະນະສຸກ ແທນທ່ານອູທອງ ສຸວັນນະວົງ ທີ່ຖືກແຕ່ງຕັ້ງໃຫ້ໄປເປັນປະທານສະພາຣາຊມົນຕຣີ.

-ໃຫ້ ຄຳເພັງ ບຸບຜາ ພົ້ນຕຳແໜ່ງຈາກ ຣ.ມ.ຕ. ຊ່ວຍ ກະຊວງປັບປູງໝູ່ບ້ານ (ຜູ້ກ່ຽວ ຂໍລາອອກ). ເຈົ້າສຸວັນນະພູມາ ສງວນຕຳແໜ່ງ ປັບປູງໝູ່ບ້ານ ນີ້ໄວ້ໃຫ້ຕົນເອັງ.

**ເຈົ້າສຸວັນນະພູມາ ປັບປູງ ຣັຖບາລ ຊຸດທີ່ 14 ຄັ້ງທີ່ 5**

ໃນວັນທີ່ 6 ມີນາ 1967 (ພ.ສ. 2510) ດັ່ງນີ້:

ກ- ຕັ້ງ ດຣ. ຄຳໄພ ອະໄພເປັນ ຣ.ມ.ຕ. ກະຊວງສາທາຣະນະສຸກ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂ- ຕັ້ງ ທ່ານ ທຸມພັນ ໄຊຍະສິດເປັນ ຣ.ມ.ຕ. ຊ່ວຍ ວ່າການກະຊວງຄັງ ແລະ ເສຖາກິດ
ຄ- ຕັ້ງ ທ່ານສຸກ ອຸບປຣະວັນ ເປັນ ຣ.ມ.ຕ. ຊ່ວຍ ວ່າການກະຊວງປັບປູງໝູ່ບ້ານ
ງ- ຕັ້ງ ທ່ານລຽນ ປຣະວິງວຽງຄຳ ເປັນ ຣ.ມ.ຕ. ຊ່ວຍ ວ່າການສຶກສາ, ກິລາ,ຍຸວະຊົນແລະ ສິລປະ
ຈ- ຕັ້ງ ເຈົ້າ ສີສຸມັງ ສີສເລີມສັກ ເປັນ ຣ.ມ.ຕ. ສຶກສາ, ກິລາ, ຍຸວະຊົນ ແລະ ສິລປະກອນ

**ສະລູບແລ້ວ ຣັຖບາລຊຸດທີ່ 14 ພາຍຫລັງການປັບປູງ 5 ຄັ້ງ ມີດັ່ງຕໍ່ໄປນີ້:**

| | |
|---|---|
| - ເຈົ້າ ສູວັນນາພູມາ | ເປັນນາຍົກ ແລະ ຣ.ມ.ຕ. ປ້ອງກັນປະເທສ, ນັກລົບເກົ່າ,ຕ່າງປະເທສ ແລະ ປັບປູງ ໝູ່ບ້ານ |
| - ເຈົ້າ ສູພານຸວົງສ໌ | ຮອງນາຍົກ ແລະ ຣ.ມ.ຕ. ເສຖາກິດ ແລະ ແຜ່ນຜັງ |
| - ເຫຼື່ອມ ອິນສີຊຽງໃໝ່ | ຮອງນາຍົກ ແລະ ຣ.ມ.ຕ. ສຶກສາ, ກິລາ, ສີລປະ ແລະຍຸວະຊົນ |
| - ເພັງ ພົງສວັນ | ຣ.ມ.ຕ. ມະຫາດໄທ ແລະ ປະຊາສົງເຄາະ |
| - ສີສຸກ ນະຈຳປາສັກ | ຣ.ມ.ຕ. ກະຊວງການຄັງ |
| - ອິນແປງ ສຸຣິຍະໄທ | ຣ.ມ.ຕ. ກະຊວງຍຸຕິທັມ |
| - ພູມີ ວົງວິຈິດ | ຣ.ມ.ຕ. ຖແລງຂ່າວ, ໂຄສະນາ, ແລະ ທອ້ງທ່ຽວ |
| - ເຈົ້າ ສີສຸມັງ ສີສະເລີມສັກ | ຣ.ມ.ຕ. ໄປສະນີ,ໂທຣະຄົມມະນາຄົມ ແລະ ຮັກສາການ |
| - ໂງ່ນ ຊະນະນິກອນ | ຣ.ມ.ຕ. ໂຍທາທິການ ແລະ ຂົ່ນສົ່ງ |
| - ເຈົ້າ ບູນອອ້ມ ນະຈຳປາສັກດິ໌ | ຣ.ມ.ຕ. ກະຊວງ ທັມມະການ |
| - ແກ້ວ ວິພະກອນ | ຣ.ມ.ຕ. ຊ່ວຍວ່າການ ກະຊວງ ປະຊາສົງເຄາະ |
| - ຄຳເຜື່ອນ ຕຸນາລົມ | ຣ.ມ.ຕ. ຊ່ວຍວ່າການ ເສຖາກິດ ແລະ ແຜ່ນຜັງ |
| - ເຈົ້າ ສຸກ ວົງສັກ | ຣ.ມ.ຕ. ຊ່ວຍວ່າການ ໂຍທາທິການ ແລະ ຂົ່ນສົ່ງ |
| - ສຸກັນ ວິໄລສານ | ຣ.ມ.ຕ. ຊ່ວຍວ່າການ ກະຊວງ ນັກລົບເກົ່າ |
| - ສຸກ ອູບປລາວັນ | ຣ.ມ.ຕ. ຊ່ວຍວ່າການ ກະຊວງ ປັບປູງໝູ່ບ້ານ |
| - ຄຳໄພ ອະໄພ | ຣ.ມ. ຕ ຊ່ວຍວ່າການ ກະຊວງ ສາທາຣະນະສຸກ |
| - ທຸມພັນ ໄຊຍະສິດ | ຣ.ມ.ຕ. ຊ່ວຍວ່າການ ກະຊວງ ການຄັງ |
| - ລຽນ ປຣະວົງວຽງຄຳ | ຣ.ມ.ຕ. ຊ່ວຍວ່າການ ກະຊວງ ສຶກສາທິການ, ສີລປະກອນ, ກິລາ, ຍຸວະຊົນ |


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 12.

# ເຫດການສັບສົນໃນນາທີສຸດທ້າຍ

ໃນຕົ້ນ 1967, ຫລັງຈາກສ້າງຖານເຣດາພູຜາທີ ສຳເຣັດແລ້ວ ສະຫາຣັຖກໍພໍດີເລີ່ມນຳເຄື່ອງບິນໄປຖິ້ມລະເບີດໃສ່ ວຽດນາມເໜືອ ໃນເຂດອ້ອມແອ້ມຮາໂນຍ. ໃນຕົ້ນປີ 1967, ກອງທະຫາຣວຽດນາມເໜືອໄດ້ສນັບສນຸນຄນະປະເທສລາວ ເຂົ້າໂຈມຕີຝ່າຍກອງທັພແຫ່ງຊາຕໃນພຣະຣາຊອານາຈັກລາວ ຢູ່ທົ່ວທຸກໆແຂວງ. ທີ່ໝັ້ນຂອງກອງທັພ ພາຍໃຕ້ການບັງຄັບບັນຊາຂອງທ່ານນາຍພົນວ່າງປາວ ໄດ້ເສັຍໃຫ້ຄອມ ມຸຍນິສ ໄປຫລາຍແຫ່ງ. ໃນປີດຽວກັນ ທາງພາຄໃຕ້ ແຂວງສາຣະວັນ; ອັດຕະປື ແລະ ເຄິ່ງໜຶ່ງຂອງແຂວງສວັນນະເຂຕ ກໍໄດ້ຕົກໃຫ້ຄອມມຸນິສຕ໌.

ໃນວັນທີ່ 10-11 ເດືອນມີນາ (March) 1968, ພູຜາທີ (LS85) ຖືກໂຈມຕີ ແລະ ໄດ້ສູນເສັຍໃຫ້ສັດຕຣູພ້ອມພື້ນທີໃນແຂວງຫົວພັນ ທັງໝົດ 90 ເປີເຊັນ (ເພາະແມ່ນທະຫາຣຊຸມຊົນເຜົ່າຈີນແດງ ຕີພູຜາທີ, ວຽດນາມເໜືອ ຄ.ມ.ນ. ໂຈມຕີເຂຊານ ແລະ ເມືອງເວ້ ໃນວຽດນາມໃຕ້). ພູຜາທີ ແມ່ນຈຸດຢຸດທະສາຕສຳຄັນທີ່ສຸດ ແມ່ນທີ່ຕັ້ງສະຖານີເຣດາ ເພື່ອຊີ້ບອກເຄື່ອງບິນໂຈມຕີທາງອາກາສໃສ່ວຽດນາມເໜືອ ແລະຕິດຕາມນັກບິນທີ່ຖືກຍິງຕົກຢູ່ວຽດນາມເໜືອ. ດັ່ງນີ້ ວຽດນາມເໜືອຈຶ່ງຕ້ອງລົບລ້າງໃຫ້ໄດ້.

## ການສູນເສັຍ ພູຜາທີ (LS85)

ແມ່ນຈຸດອ່ອນຂອງສະຫາຣັຖ ແລະ ຝ່າຍວຽງຈັນທນ໌ ເພາະວ່າ ການວາງແຜນປ້ອງກັນພູຜາທີ ບໍ່ແໜ້ນໜາ ເມື່ອສັດຕຣູບຸກໂຈມຕີເອົາ ບໍ່ມີການໜູນຫລັງຊ່ວຍ, ການສນັບສນຸນທາງອາກາສ ກໍບໍ່ມີ ປ່ອຍໃຫ້ໜ່ວຍປ້ອງກັນຕໍ່ສູ້ໃຫ້ຕາຍຄາພູ ເທົ່ານັ້ນ. ຈຶ່ງເປັນຈຸດອອ່ນທີ່ເປີດໂອກາດໃຫ້ສັດຕຣູ ເປີດສາກບຸກ ໂຈມຕີທົ່ວພຣະຣາຊອານາຈັກລາວ ແລ້ວລາມໄປໃສ່ວຽດນາມໃຕ້ ພາໃຫ້ເສັຍອັດຕະປື ແລະພາກໃຕ້ ດ້ານຕາວັນອອກຂອງແຂວງປາກເຊ, ສວັນນະເຂຕ ທັງໝົດ ຕົກໃຫ້ວຽດນາມເໜືອ ຜູ້ຮຸກລານລາວ.

ໃນການສູ້ຮົບຄັ້ງນີ້ ທະຫາຣກອງທັພແຫ່ງຊາຕລາວ ຈັບທະຫາຣວຽດນາມເໜືອເປັນສະເລີຍເສິກໄດ້ ຈຳນວນຫລາຍຮ້ອຍຄົນ. ໃນວັນທີ່ 13 ເດືອນຕຸລາ (October) 1967, ຕອນເຈົ້າສຸວັນນະພູມາ ນາຍົກຣັຖະມົນຕຣີ ໄດ້ສເດັຈໄປຮ່ວມກອງປະຊຸມສຫະປະຊາຊາຕ (UN). ສະເດັຈກໍໄດ້ກ່າວປະນາມ ວຽດນາມເໜືອ ຜູ້ລຸກລານລາວ ຢູ່ໃນສຫາປະຊາຊາຕ ແລະຂໍຄວາມຊ່ວຍເຫລືອ ແຕ່ສຫະປະຊາຊາຕ ບໍ່ໄດ້


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ດຳເນີນການແກ້ໄຂຈັກຍ່າງ. ຢູ່ໃນນະຄອນວຽງຈັນທນ໌ ສະເດັຈກໍໄດ້ເຊີນນັກຂ່າວນາໆຊາຕໄປໃຫ້ສຳພາສ ສເລີຍເສິກວຽດນາມເໜືອ ແລະໄດ້ໃຫ້ອອກຂ່າວທົ່ວໂລກ.

ໃນທ້າຍ ປີ 1967 ແລະ ຕົ້ນປີ 1968, ວຽດນາມໃຕ້ ຖືກໂຈມຕີ ຢ່າງໜັກຈາກ ວຽດນາມເໜືອ ຄ.ມ.ນ. ໃນປີ 1968, ແມ່ນປີ ເລີ່ມກໍ່ສ້າງເຂື່ອນນ້ຳງື່ມ. ໃນຕົ້ນປີ 1969, ຫລາຍແຫ່ງໃນແຂວງຊຽງຂວາງ ແລະ ພາຄໃຕ້ຂອງລາວ ໄດ້ເສັຍໃຫ້ສັດຕຣູໄປ ຄື: ແຂວງຫົວພັນເສັຍໄປໃຫ້ສັດຕຣູ 100 ເປີເຊັນ, ພາຄຕາວັນອອກຂອງແຂວງສວັນນະເຂດ ເສັຍໄປ 70 ເປີເຊັນ, ຢູ່ບໍຣິເວັນແຂວງປາກເຊ ໄດ້ເສັຍປາກຊ່ອງ ແລະ ພາຄຕາວັນອອກທັງໝົດ ໃຫ້ແກ່ສັດຕຣູ 60 ເປີເຊັນ. ສະພາບການດັ່ງກ່າວ ໄດ້ເຮັດໃຫ້ປະ ຊາຊົນລາວທີ່ຢູ່ຕາມຊົນນະບົດ ໜີຈາກຖິ່ນຖານບ້ານເກີດຂອງຕົນເຂົ້າ ໄປຢູ່ໃນເມືອງ ຫລືແຂວງອື່ນ ຫລາຍກວ່າໜຶ່ງລ້ານເຄິ່ງ (1.5 ລ້ານ) ຂອງປະຊາຊົນລາວ ສາມລ້ານປາຍ ຍ້ອນບໍ່ມີຄວາມປອດໄພ້ຍມາຈາກ ການລຸກລານຂອງ ວຽດນາມເໜືອ ເຂົ້າມາທຳລາຍ ຣາຊອານາຈັກລາວ.

ໃນກາງປີ 1969, ເຂດທະຫາຣພາຄ 2; ພາຄ 3; ພາຄ 4 ໄດ້ກັບຄືນໄປໂຈມຕີສັດຕຣູ ເພື່ອ ຍຶດພື້ນທີ່ຫລາຍແຫ່ງຄືນ ໂດຽໄດ້ຮັບການສນັບສນຸນທາງ ອາກາສຊ່ວຍຈາກສະຫາຣັຖ ແລະ ການສນັບ ສນຸນກຳລັງທະຫາຣຈາກຣາຊອານາຈັກໄທ໌ຍ ແຕ່ກໍປ້ອງກັນພື້ນທີ່ຍືດໄດ້ນັ້ນ ບໍ່ໄດ້ດົນ ຕ້ອງເສັຍຄືນ. ຢູ່ທາງພາຄ 2 ແລະ ພາຄໃຕ້ ຂອງລາວ ກອງທັພແຫ່ງຊາຕ ໄດ້ພະຍາຍາມກັບໄປປົດປ່ອຍເອົາ ທີ່ໝັ້ນຫລາຍແຫ່ງຄືນ ຢູ່ແຂວງຫົວພັນ; ແຂວງຊຽງຂວາງ; ແຂວງສວັນເຂດ, ຢູ່ແຂວງປາກເຊ ທີ່ປາກຊ່ອງ, ແຂວງສາຣະວັນ, ອັຕະປື ແລະ ຫລາຍບ່ອນ, ແຕ່ ກໍບໍ່ສາມາດຍຶດໄດ້ ເພາະກຳລັງຂອງສັດຕຣູ ມີຫລາຍກວ່າ ແລະ ອາວຸທກໍທັນສະໄມກ່ວາ. ຈຶ່ງເຮັດໃຫ້ຝ່າຍມິດຕ້ອງສູ້ຖອຍ ແຕ່ລະບາດກ້າວຕລອດມາ ບໍ່ສາ ມາຕຕ້ານທານໄດ້ຕາມຄວາມຕ້ອງການ ເພາະວຽດນາມເໜືອໄດ້ສົ່ງທະຫາຣເປັນຈຳນວນຫລາຍກອງ ພົນ ໄປປ້ອງກັນພື້ນທີ່ຫາກໍຍຶດໄດ້ໃໝ່. ການຕໍ່ສູ້ທາງພາກເໜືອ ທີ່ທົ່ງໄຫຫີນນັ້ນ ຍາມລະດູຟົນ ຝ່າຍມິຕໄດ້ປຽບ ເພາະຝ່າຍມິຕມີການຊ່ວຍ ເຫລືອທາງອາກາສ ແຕ່ຍາມແຫລ້ງ ສັດຕຣູໄດ້ປຽບ ເພາະສັດຕຣູເຄື່ອນທີ່ໄດ້ ແລະໃຊ້ອາວຸດໄດ້ ທຸກຊນິດທີ່ຍິງໄດ້ໄກກ່ວາຂອງຝ່າຍມິດ.

ໃນເດືອນມິຖຸນາ (June) 1970 ຝ່າຍຣັຖບາລວຽງຈັນທນ໌ ແລະ ຝ່າຍລາວ ຄ.ມ.ນ. ໄດ້ລີ້ເລີ່ມຕິດຕໍ່ກັນຢູ່ນະຄອນວຽງຈັນທນ໌ ເພື່ອເຕົ້າໂຮມລາວສອງຝ່າຍ. ໃນເດືອນກຸມພາ (February) 1971, ທະຫາຣວຽດນາມໃຕ້ ຫລາຍກອງພັນໄດ້ ອອກໄປກວດລ້າງ ຢູ່ບໍຣິເວັນລຳເຊີນ (Lamson 719), ເພື່ອໂຈມຕີ ຕັດທາງລຳລຽງຂອງວຽດນາມເໜືອ ຕາມເສັ້ນທາງໂຮຈິມິນ (Doan 559 ) ທີ່ຜ່ານເຊໂປນ (Sepone) ແລະ ຢູ່ທາງທິດຕາວັນອອກຂອງແຂວງສວັນເຂດ. ການເຂົ້າໄປຄັ້ງນີ້ ໄດ້ມີການປະທະກັນຢ່າງຮູນແຮງ ເຮັດໃຫ້ ທະຫາຣວຽດນາມໃຕ້ ຕ້ອງໄດ້ລ່າຖອຍກັບ ມີຫລາຍຄົນຖືກຈັບໄປເປັນສເລີຍເສິກ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນວັນທີ່ 2 ເດືອນມັງກອນ (January) 1971, ກອງທະຫານວຽດນາມເໜືອ ຮ່ວມກັບຄນະປະເທສລາວ ໄດ້ເຂົ້າໂຈມຕີກອງບັນຊາການທະຫານ ພາຄ 2 ຢູ່ລ່ອງແຈ້ງ, ແຕ່ໄດ້ຖືກໂຈມຕີພັກ ແລ້ວໄດ້ຖອຍກັບໄປ. ທະຫານພາຄ 2 ໄດ້ໄລ່ໄປເຖິງສອງຮັກເມືອງເຄິງ ແລະ ລາດບວກ.




*ຮູບທີ່ 158. ຈະຣວດ Rocket 122m/m ຂອງວຽດນາມເໜືອ ທີ່ໄດ້ຮັບການຊ່ວຍເຫລືອ ມາຈາກ ຣັຊເຊັຍ ຍິງໄດ້ ໃນລະຍະ25 ຫາ 30 ກິໂລແມຕຣ໌*

ໃນເດືອນພຶສະພາ (May) 1971, ຝ່າຍຄນະປະເທສລາວ ຮຽກຮ້ອງໃຫ້ມີການເຈຣະຈາອີກ ແຕ່ຈະເຫັນໄດ້ວ່າ ໃນທຸກຄັ້ງທີ່ຄອມມູຍນິສຕ໌ຮຽກຮ້ອງໃຫ້ມີການເຈຣະຈາ ແມ່ນການຊອກຫາແຜນການທ່ວງເວລາ ເພື່ອໃຫ້ຝ່າຍຕົນ ມີໂອກາສຕຽມແຜນໃໝ່ ເພື່ອຕໍ່ສູ້ໂຈມຕີຝ່າຍວຽງຈັນຫນ໌ເທົ່ານັ້ນ.

ໃນເດືອນມັງກອນ (January) ປີ 1972 ໄດ້ມີການເລືອກຕັ້ງຜູ້ແທນຣາຊດອນອີກ, ຈຳນວນສະມາຊິກສະພາຜູ້ແທນຣາຊດອນທັງໝົດ 59 ທ່ານ. ສະມາຊິກສະພາຜູ້ແທນຊຸດເກົ່າ ຮັບເລືອກໄດ້ພຽງສິບແປດທ່ານເທົ່ານັ້ນ. ການປະກອບຣັຖບາລຊຸດໃໝ່ ໄດ້ມອບໃຫ້ສະເດັຈເຈົ້າສູວັນນະພູມາເປັນຜູ້ປະກອບ, ແຕ່ບໍ່ໄດ້ຮັບຄວາມໄວ້ວາງໃຈຈາກສະພາແຫ່ງຊາຕ. ແຕ່ຍ້ອນການເມືອງຂອງຕ່າງປະເທສ ບີບບັງຄັບ, ເປັນຕົ້ນແມ່ນ ສະຫາຣັຖແລະບັນດາທູຕຂອງຕ່າງປະເທສທີ່ປະຈຳຢູ່ລາວ ຕ້ອງການໃຫ້ເຈົ້າສຸວັນນະພູມາ ເປັນນາຍົກຣັຖມົນຕຣີຕໍ່ໄປ. ດັ່ງນັ້ນສະພາຜູ້ແທນຣາຊດອນ ຈຳເປັນຕ້ອງໄດ້ຍອມຮັບ ແລະ ປະຕິບັດ ຕາມ.

ໃນເດືອນ ກໍຣະກະດາ (July) ປີ 1972 ຣັຖບາລເຈົ້າສຸວັນນະພູມາ, ແລະ ຝ່າຍຄນະປະເທສລາວ ໄດ້ເປີດການເຈຣະຈາກັນອີກ. ເຖິງຈະເຈຣະຈາເທົ່າໃດ ກໍບໍ່ມີປະໂຍດ ເພາະອຳນາຕ ບໍ່ແມ່ນຢູ່ໃນມືຂອງ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ລາວແດງ, ມັນແມ່ນ ນະໂຍບາຍ ແລະແຜນການຂອງ ວຽດນາມເໜືອ ຜູ້ເປັນນາຍ, ຜູ້ມີອຳນາຕ ແລະ ເປັນຜູ້ສັ່ງ ທັງໝົດ ດັ່ງຕໍ່ໄປນີ້ :

- ເຫຕການໃນປີ 1972, ລູກຊາຍຂອງເຈົ້າສຸພານຸວົງສ໌ ຖືກຂ້າຕາຍຢູ່ຊຳເໜືອ, ແຂວງຫົວພັນ ແລ້ວຖິ້ມໂທສໃສ່ ວ່າແມ່ນເຜົ່າລາວສູງ "ມົ້ງ" ເປັນຜູ້ຂ້າ.
- ໃນປີດຽວກັນນີ້ ໄກສອນ ພົມວິຫານ ໄດ້ຂຶ້ນກຳອຳນາຕທັງໝົດຂອງພັຄຄນະປະເທສລາວ, ແລະ ໄດ້ປ່ຽນຊື່ຂອງພັຄ ເອີ້ນວ່າ "ພັຄປະຊາຊົນລາວ" .ເວລານັ້ນເຈົ້າສຸພານຸວົງສ໌ ເລີ່ມໝົດອຳນາຕ. ຝ່າຍຄອມມຸຍນິສຕ໌ລາວ ເລີ່ມເຂົ້າໃຈແລະເລີ້ມເຫັນຊັດເຈັນວ່າ ວຽດນາມເໜືອໄດ້ກືນກິນລາວ ໄປແລ້ວ.

ໃນວັນທີ່ 22 ເດືອນກັນຍາ (September) ປີ 1972, ພັຄປະຊາຊົນລາວໄດ້ຮຽກຮ້ອງໃຫ້ມີການເຈຣະຈາ ໂດຍບໍ່ມີເງື່ອນໄຂ ແຕ່ມັນໄດ້ສາຍເກີນກ່ວາຈະແກ້ແລ້ວ ເພາະວຽດນາມເໜືອ ຮູ້ຈຸດອອ່ນຂອງສະຫາຣັຖ ຜູ້ໜູ່ນຫລັງ ຝ່າຍວຽງຈັນທນ໌ ເຊັ່ນ:

- ການເດີນຂະບວນ ຂອງປະຊາຊົນອາເມຣິກາ ເພື່ອຕ້ານສົງຄາມວຽດນາມ,
- ບັນຫາ ວໍເຕີເກສ (Watergate) ຂອງປະທານາທິບໍດີ ນິກສັນ (ແມ່ນຕອນລູກນ້ອງຂອງ ພັຄຣີພາບຣີແກຣ ຫ້າຄົນໄດ້ລັກລອບເຂົ້າໄປເບິ່ງເອກະສານຂອງພັຄ ດີໂມກຣາດ)
- ການໃຊ້ງົບປະມານ ທີ່ບໍ່ໃຫ້ປະຊາຊົນຮູ້ນຳ ແລະ
- ການໜູ່ນຫລັງວຽດນາມເໜືອຂອງຣັຊເຊັຍ ດ້ວຍອາວຸທສົງຄາມອັນທັນສມັຍ ແລະອື່ນໆອີກ ຫລາຍຢ່າງ ທີ່ເຮັດໃຫ້ສະຫາຣັຖ ຕ້ອງຖອນອອກຈາກອິນດູຈີນ ຢ່າງບໍ່ມີທາງເລືອກ.

ໃນເດືອນຕຸລາ (October) 1972, ລາວສອງຝ່າຍ ໄດ້ຕົກລົງ ຮ່ວມກັນ ໄດ້ເຈຣະຈາ ຕໍ່ເນື່ອງກັນມາ ເພື່ອ ປະກອບຣັຖບາລ ປະສົມຄັ້ງທີ່ສາມ. ຜູ້ນຳຝ່າຍແນວລາວໄດ້ເລົ່າສູ່ຝ່າຍວຽງຈັນທນ໌ ວ່າ " *ພວກເຮົາຄົນ ລາວ ຕົນໄດ້ຫວິດຜືນແຜ່ນດິນລາວໝົດທຸກຄົນແລ້ວເດີ້ ຕ້ອງຊ່ວຍກັນໄດ໋!* " ຂ້າພະເຈົ້າເອງ ກໍໄດ້ຍິນ ຈາກປາກຂອງຣັຖະມົນຕຣີຝ່າຍແນວລາວ ເວົ້າຕໍ່ໜ້າບ້ານ ພະຍາຕູ້ບີ ລີຟຸງ ແລ້ວໄດ້ນຳ ຄຳເວົ້ານີ້ ມາເລົ່າ ສູ່ ທ່ານນາຍພົນຕຣີ ວ່າງປາວ ຟັງ ແຕ່ເພິ່ນຕອບວ່າ "*ພວກມັນຕົນຫວິດດິນແທ້ ແຕ່ພວກເຮົາບໍ່ເປັນຫັຽງ*".

ໃນປີ 1973, ລາວສອງຝ່າຍໄດ້ຕົກລົງ ຮ່ວມກັນປະກອບຣັຖບາລປະສົມຄັ້ງທີ່ສາມ ເວລານີ້ ຝ່າຍກາງ ເຫລືອແຕ່ຊື່ ແລະມີພຽງ ສະເດັຈເຈົ້າ ສຸວັນນະພູມາ ຄົນດຽວເທົ່ານັ້ນ ສ່ວນກຳລັງທະຫາຣ ຝ່າຍກາງ ກັບ ກອງແລ ແມ່ນ ສລາຍຕົວໄປແຕ່ ປີ 1967 ພູ້ນ ບໍ່ມີຫັຽງເຫລືອ ມີແຕ່ຝ່າຍລາວແດງ ແລະຝ່າຍຂວາວຽງ ຈັນທນ໌ເທົ່ານັ້ນ. ການຕົກລົງຮ່ວມກັນຍັງບໍ່ທັນມີຫັຽງລ່ອງລອຍກັນໄດ້ ຍ້ອນລາວ.ຄ.ມ.ນ. ໃຊ້ແຜນໂຄງ ການ 18 ຂໍ້ ເປັນຂໍ້ອ້າງ. ໃນວັນທີ່ 9 ເດືອນ ກຸມພາ (February) 1973, ທ່ານ ແຮນຣີ ກີສຊີງເກີ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

(Henry Kissinger) ມາຢັ້ງມຢາມລາວ ມາສັ່ງໃຫ້ຝ່າຍຂວາເຊັນສັນຍາກັບຝ່າຍລາວ ຄ.ມ.ນ, ບໍ່ດັ່ງນັ້ນ ແມ່ນ ຖືກຕັດການຊ່ວຍເຫລືອ.
ໃນວັນທີ່ 21 ເດືອນ ກຸມພາ (February) 1973, ການຢຸດຍິງ ຢູ່ໃນລາວໄດ້ເລີ່ມປະຕິບັຕ. ໃນເວລານີ້ ຝ່າຍວຽງຈັນທນ໌ ຍັງບໍ່ເຫັນດີ ຕໍ່ໂຄງການ 18 ຂໍ້ ທີ່ສະເນີໂດຍຝ່າຍລາວຄອມມຸຍນິສຕ໌ ຄື: ເອົາວຽງຈັນທນ໌ ແລະ ຫລວງພະບາງ ເປັນສູນກາງເຕົ້າໂຮມສອງຝ່າຍ, ໃຫ້ລາວ ຄ.ມ.ນ. ນຳກຳລັງທະຫາຣ ຫລາຍພັນ ຄົນມາໃສ່ສອງນະຄອນນີ້ ແລະ ໃຫ້ຝ່າຍວຽງຈັນທນ໌ ຍົກຍ້າຍກຳລັງທະຫາຣຂອງຕົນອອກໄປໃຫ້ຫ່າງໄກ ຈາກ ສອງຕົວເມືອງດັ່ງກ່າວ. ຝ່າຍວຽງຈັນທນ໌ບໍ່ເຫັນດີໃນການແບ່ງປັນໜ້າທີ່ ແລະ ການປັກຫລັກໃນພື້ນ ທີ່ຕ່າງໆ ເພາະ ລາວແດງ ເອົາປຽບຫລາຍໂພດ."

ໃນວັນທີ່ 14 ເດືອນກັນຍາ (September) 1973 ຝ່າຍວຽງຈັນ ແລະ ຝ່າຍ**ພັຄປະຊາຊົນລາວ** ໄດ້ຕົກລົງ ເຊັນສັນຍາ ປະກອບຣັຖບາລ**ປະສົມ**ສອງຝ່າຍ ເທື່ອທີ່ສາມ ແລະ ຄນະມົນຕຣີປະສົມການເມືອງ. ທ່ານນາຍພົນ ວ່າງປາວ ຈື່ງໄດ້ເລືອກເອົາທ່ານ **ຢາງດາວ** ເຂົ້າໄປຮ່ວມ ເປັນຜູ້ຕາງໜ້າຊົນຊາຕຊົນເຜົ່າ ຝ່າຍຂວາ ວຽງຈັນທນ໌ ຊື່ງເປັນການເຫັນດີຂອງທ່ານເອງ ຜູ້ດຽວ, ເປັນຜູ້ຕັດສິນໃຈເລືອກເອົາ. ກ່ອນຈະ ເລືອກ ນັ້ນ ກໍໄດ້ມີຂ້າຣາຊການຊັ້ນສູງ ທີ່ໄດ້ມີການສຶກສາ ມາຈາກຕ່າງປະເທສຫລາຍຄົນ ໄດ້ເຂົ້າຮ່ວມ ປະຊູມກັບທ່ານ ບໍ່ເຫັນດີ ໃຫ້ເລືອກເອົາ **ຢາງດາວ.** ແຕ່ກໍສຸດຄວາມສາມາດທີ່ຈະຄັດຄ້ານການຕັດສິນ ໃຈຂອງ ນາຍພົນ ວ່າງປາວ, ທີ່ເຫັນວ່າ ພໍ່ຂອງຢາງດາວ ແມ່ນນັກຕໍ່ສູ້ ຄ.ມ.ນ. ມານານ, ແລະ ເຄີຍໄດ້ ປະຕິບັດ ວຽກງານຊ່ວຍທ່ານຢ່າງດີ. ນອກຈາກນີ້ ກໍໄດ້ເປັນອິພະຍົບ ໜີ ຄ.ມ.ນ. ມາແຕ່ວຽດນາມເໜືອ ອີກ. ແຕ່ໜ້າເສັຍດາຍ ບໍ່ໄດ້ເປັນ ໄປຕາມຄວາມຄິດຂອງເພິ່ນ ນອກຈາກນີ້ **ຢາງດາວ**ໄດ້ປະກາດວ່າ ແມ່ນ ພຣະເຈົ້າມະຫາຊີວິດລາວ ເປັນຜູ້ເລືອກ **ຢາງດາວ** ໄປເປັນຜູ້ສຳຄັນ ໃນຄນະມົນຕຣີປະສົມການ ເມືອງ "ແມ່ນຄຳເນຣະຄຸນ ມັນບໍ່ມີຄວາມຈິງ."

## ການຈັດຕັ້ງຣັຖບາລ ປະສົມລາວສອງຝ່າຍ

ການຈັດຕັ້ງຣັຖບາລປະສົມລາວສອງຝ່າຍ ໃນພຣະຣາຊອານາຈັກ**ລາວ**ຄັ້ງນີ້ ໄດ້ເຮັດໃຫ້ຕົ້ນຕະກຸນຂອງ ເຊື້ອເຈົ້າແຜ່ນດິນລາວ "ເຈົ້າຊີວິດຂອງຣາຊອນາຈັກລາວ" ສິ້ນສຸດລົງໃນທ້າຍປີ 1975 ແລະໄດ້ປ່ຽນ ເມືອງລາວໄປເປັນປະເທສ ***" ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ"*** ປົກຄອງດ້ວຍພັຄ ລາວ ຄ.ມ.ນ. ພັຄດຽວ ເປັນຜູ້ບົງການທຸກຢ່າງໂດຍ ອ້າງວ່າ "ແມ່ນສູນກາງສັ່ງ" ບໍ່ມີຜູ້ໃດຕໍ່ວ່າຕໍ່ຂານໄດ້. ສູນ ກາງພັຄສັ່ງ ແລ້ວ ຕ້ອງປະຕິບັດຕາມ ບໍ່ດັ່ງນັ້ນກໍແມ່ນຖືກສົ່ງໄປທໍຣະມານຢູ່ໃນຄຸກ ຊື່ງເອີ້ນ ວ່າ "ສູນສັມ ມະນາ" ຕ້ອງໄປຮຽນໃຫ້ເຖິງຖອງ. ແຕ່ໄປແລ້ວ ກໍບໍ່ຮູ້ວ່າມື້ໃດຈະໄດ້ກັບ ຕ່າວຄືນມາ ເຫັນຄອບຄົວ ອີກ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

***ຕົວຢ່າງ*** *ຂອງ ຣັຖະມົນຕຣີ **ທ້າວທອງສຸກ ສາຍສັງຄີ** ໄດ້ມີຈົດໝາຍລາອອກຈາກໜ້າທີ່ຂອງຕົນ ໃນວັນທີ່ 26 ເດືອນສິງຫາ (August) 1990 ເພາະເຫັນວ່າ ການປົກຄອງຂອງລະບອບ ຄ.ມ.ນ. ແມ່ນແຜນຂີ້ຕົວະ ຫລອກລວງປະຊາຊົນກົນຊາດ ພັດຖຽວຈະເຮັດໃຫ້ປະເທສລາວກ້າວໜ້າບໍ່ໄດ້. ແຕ່ ທ້າວ ທອງສຸກ ກໍຕ້ອງ ຖືກຈັບເອົາໄປຂັງຄຸກ ຢູ່ສູນສັມມະນາ ຢ່າງບໍ່ມີໂອກາສໄດ້ເຫັນຄອບຄົວ ແລະໂລກພາຍນອກອີກ ນອກຈາກ ນີ້ ກໍບໍ່ມີຜູ້ໃດຮູ້ຂ່າວ ສະຕາກັມຂອງທ່ານອີກເລີຍ ວ່າສະພາບເປັນແນວໃດ?*

ສະພາບການປ່ຽນແປງໃນລາວຄັ້ງນີ້ ໄດ້ເຮັດໃຫ້ປະຊາຊົນຝ່າຍພຣະຣາຊອານາຈັກລາວ ຫລືຝ່າຍຂວາ ວຽງຈັນທນ໌ ໄດ້ຮັບຄວາມເຈັບປວດຢ່າງບໍ່ເຄີຍມີມາແຕ່ກ່ອນ ໂດຽສະເພາະແມ່ນຜູ້ທີ່ຖືກຫລອກໄປໃສ່ສູນສັມມະນາ ແລ້ວຖືກທໍຣະມານ ທັງຈິດໃຈ ແລະ ຮ່າງກາຍ. ຕາມຄຳຊຽນຂອງ ທ່ານ ພ.ອ ຄຳພັນ ທັມະຂັນຕິ ຢູ່ໃນປື້ມບັນທຶກຂອງທ່ານ ໜ້າ 234 ເຖິງ 235 ແມ່ນຖືກດ່າ, ຖືກຕີ, ຖືກຫາເຣື່ອງໃສ່ ນາໆປະການ, ຖືກອົດອາຫາຣ, ລົດອາຫາຣ, ກິນອາຫາຣ ທີ່ ຮ້າຍຄ່າກ່ວາ ຂອງສັດ, ເຮັດວຽກໜັກ, ຖືກລົງໂທສຫລາຍຢ່າງ, ໃສ່ໂສ້ຂາ ຄູມບໍ່ໃຫ້ແລ່ນໄດ້, ແມ້ແຕ່ຍ່າງ ກໍຍັງທໍຣະມາຣ, ໃສ່ຢາເບື່ອໃສ່ ອາຫາຣໃຫ້ຕາຍຕາມເວລາ ແລະ ຕາມໂຄງການ ທີ່ໄດ້ວາງໄວ້, ບໍ່ຕາຍກໍເອົາໄປຂ້າຖິ້ມ, ເອົາໄປຍິງເປົ້າ, ບ່ອນຢູ່ ບ່ອນນອນ ຮ້າຍກວ່າ ຂອງສັດເດັຍຣະສາຣ; ມີມັດ, ເມັນ ເຕັມໄປທຸກບ່ອນ. ແມ່ນການທໍຣະມານທີ່ປ່າເຖື່ອນທີ່ສຸດໃນໂລກ.

ທຸງຊາຕ ຊ້າງສາມຫົວ ພຣະຣາຊອານາຈັກລາວ



ຮູບທີ່ 159. *ທຸງຊາຕຂອງພະຣາຊອານາຈັກລາວ ລ້ານຊ້າງ "ຊ້າງສາມຫົວ" ໄດ້ສິ້ນສຸດລົງໃນທ້າຍປີ 1975.*


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ຕົ້ນຕະກູນຂອງພະຣາຊວົງຄ໌ລາວໄດ້ສິ້ນສຸດລົງ ທ້າຍ ປີ 1975



*<u>ຮູບທີ່ 160</u>. ພຣະບາດສົມເດັຈພຣະເຈົ້າມະຫາຊີວິດ ສຣີສວ່າງ ວົງຄ໌ ປະສູດປີ 1885 ເປັນເຈົ້າຊີວິດລາວ ໃນປີ 1904 -1959 ສິ້ນພຣະຊົນ ໃນວັນທີ່ 29 ເດືອນຕຸລາ (October) 1959 ຢູ່ທີ່ ປະທັບຫລວງພຣະບາງ ພຣະອົງ ມີ ພຣະມະເຫສີ 12 ອົງ ມີບຸກ ດ້ວຍກັນ 23 ອົງ. ກ່ອນສິ້ນພະຊົນ ພະອົງໄດ້ຮັບສັ່ງວ່າ <u>ເຊື້ອເຈົ້າຂອງ ພະອົງໄດ້ ສິ້ນສຸດລົງ ກັບພະອົງເທົ່ານັ້ນ.</u>*




*<u>ຮູບທີ່ 161</u>. ເຈົ້າມະຫາອຸປະຣາຊບູນຄົງ ປະສູດເດືອນ ກໍຣະກະດາ (July) 1857 (ພ.ສ. 2400) ສິ້ນພຣະຊົນໃນວັນທີ່ 26 ເດືອນ ກໍຣະ ກະດາ (July) 1920 ທີ່ ນະຄອນວຽງຈັນທນ໌. ເປັນພະບິດາ ຂອງ ເຈົ້າເພຊຣາຊ, ເຈົ້າສຸວັນນະພູມາ ແລະ ເຈົ້າສຸພານຸວົງສ໌.*

*ເຈົ້າມະຫາ ອຸປະຣາຊບູນຄົງ ມີພຣະມະເຫສີ 11 ອົງ ມີລູກ ດ້ວຍກັນ 24 ອົງ ຊາຍ 11 ອົງ ແລະ ຍິງ 13 ອົງ.*

*ວັນທີ່ 7 ເດືອນຕຸລາ (October) 1901 ແລະ ວັນທີ່ 8 ເດືອນກູມພາ (February) 1903, ຝຣັ່ງ, ໄທ໌ຍ ພ້ອມກັນໄດ້ແບ່ງຊາຍແດນ ຝັ່ງຂວາແມ່ນ້ຳຂອງ ເປັນຂອງໄທ໌ຍ, ຝັ່ງຊ້າຍເປັນຂອງຝຣັ່ງເສສ. ເຈົ້າບູນຄົງ ເປັນຜູ້ຕໍ່ຕ້ານຢ່າງແຂງແຮງ. ໃນປີ 1946 ໄທ໌ຍໄດ້ສົ່ງແຂວງໄຊຍບຸຣີ ແລະ ຈຳປາສັກ ຄືນໃຫ້ລາວ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com






ຮູບທີ່ 162. ພຣະບາດສົມເດັດພຣະເຈົ້າມະຫາຊີວິດ ສຣີສວ່າງ ວັທນາ ເກີດປີ 1907 ສິ້ນພຣະຊົນໃນປີ 1978 ທີ່ສູນກັກຂັງ ຄຸກທີ່ເມືອງວຽງໄຊແຂວງຫົວພັນ ຍ້ອນທາຣູນຈາກ ຝ່າຍ ຄອມມຸຍນິສຕ໌ ລາວແດງ ແລະ ວຽດນາມເໜືອ.

ຮູບທີ່ 163. ສົມເດັຈເຈົ້າບູນອູ້ມ ນະຈຳປາສັກ ເກີດປີ 1911 ສິ້ນພຣະຊົນທີ່ປະເທສ ຝຣັ່ງເສສ ທີ່ເມືອງ Boulogne-Sur-Seine, France ໃນວັນທີ່ 18 ເດືອນມີນາ (March) 1980.



ຮູບທີ່ 164. ເຈົ້າມະຫາອຸປະຣາຊເພັຊະຣາຊປະສູດ ວັນທີ່ 1 ເດືອນ ກຸມພາ (February) 1890, ໄປລີ້ໄພ້ຍູ່ປະເທສໄທ໌ຍປີ 1946 ຈົນເຖິງ ປີ 1957 ໄດ້ 11 ປີ ຈຶ່ງກັບລາວ. ສິ້ນພະຊົນ ດ້ວຍພະຍາດເລືອດສູງ ວັນທີ່ 14 ເດືອນ ຕຸລາ (October) 1959 ຢູ່ລາວ. ແມ່ນເຊື້ອເຈົ້າຂອງລາວ ອົງໜຶ່ງທີ່ພະຍາຍາມ ຊອກເອົາເອກກະຣາຊມາສູ່ປະຊາຊົນລາວ ແຕ່ເວລານັ້ນ ຄວາມຄິດ ຂອງຄົນ ລາວຍັງແຕກຕ່າງກັນ ແມ້ແຕ່ເຊື້ອເຈົ້າກັນເອງ ກໍຍັງມີຄວາມເຫັນແຕກຕ່າງກັນ. ຜົລສຸດທ້າຍ ລາວກໍຕົກເປັນທົວ ເມືອງຂຶ້ນແບບໃໝ່ ຕາມ ໃນຫູງຊາຕ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 165</u>. ສເດັຈເຈົ້າ ສຸວັນນາພູມາ ປະສູດ ປີ 1901 ສິ້ນພະຊົນ ໃນປີ1984 ທີ່ນະຄອນວຽງຈັນທນ໌. ເປັນອົງທີ່ຊອຫາຄວາມເປັນກາງມາສູ່ ປະຊາຊົນລາວ ແຕ່ໄດ້ແບ່ງລາວເປັນສາມຝ່າຍ ຕໍ່ສູ້ກັນເອງ. ສຸດທ້າຍ ຕົກເປັນເຄື່ອງມື ທາງອ້ອມ ຂອງ ຄ.ມ.ນ. ຢ່າງໜ້າເສັຍດາຍ ແລະ ເຈັບປວດທີ່ສຸດໃນປວັດສາຕຂອງ ລາວໃນ 1975.*



*<u>ຮູບທີ່ 166</u>. ເຈົ້າສຸພານຸວົງສ໌ ປະສູດເດືອນ ກໍຣະກະດາວັນທີ່ 13 July 1909 ທີ່ນະຄອນວຽງຈັນ. ສິ້ນພະຊົນ ໃນວັນທີ່ 9 ເດືອນ ມັງກອນ (January) 1995 ຢູ່ບ້ານໂພນສະອາດ, ເມືອງໄຊເຊດຖາ ນະຄອນ ວຽງຈັນທນ໌. ພະອົງ ໄດ້ເອົາຈົດໝາຍນ້ອຍໆ ມອບໃຫ້ທ່ານນາຍພົນ ວ່າງ ປາວ ໃນປີ 1974 ຢູ່ໃນເຈັ້ຍ ບອກວ່າ ຢາກພົບທ່ານນາຍພົນ ກ່ຽວເຣື່ອງບ້ານເມືອງຈະເສັຍ.*

*ປື້ມປວັດຂອງ ເຈົ້າຄໍາຫລວງ ໜໍ່ຄໍາ ຂຽນວ່າ: "ເຈົ້າສຸພານຸວົງ ແມ່ນ ມ້າໄມ້ ຕົ່ງ ແກວ ຄ.ມ.ນ. ມາ ຄອບຄອງ ລາວ ເປັນທົວເມືອງຂຶ້ນແບບໃໝ່ ທີ່ເອີ້ນວ່າ "ສະຫາພັນ <u>ອິນດູຈີນ</u>." ພາສາອັງ ກິຕເອີ້ນ ມ້າໄມ້ນັ້ນ ວ່າ ໂຕຣຍັນໂຮສ (Trojan Horse) ພາ ສາຝຣັ່ງເອີ້ນ ເຊີວານ ເດີຕຣົວ (Cheval de Troi) ຫລືເປັນທົວເມືອງຂຶ້ນ ແບບໃໝ່ ໃຫ້ແກວ ຄ.ມ.ນ. ແລະໄດ້ ຕັ້ງລາວເປັນ ສປປລ. ເພາະຕິດໜີ້ເລືອດຂອງ ແກວ ທີ່ມາຕໍ່ສູ້ຕາງລາວ ຄ.ມ.ນ. ແຕ່ 1945 ຈົນເຖິງ 1975.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາກທີ່ 13.

# ຣັຖບາລສອງຝ່າຍຊຸດທີ່ສາມແລະຊຸດສຸດທ້າຍ



*ຮູບທີ່ 167. ຈາກຊ້າຍຫາຂວາ ພຣະຍາເພັງ ພົງສະວັນ ແລະພະນະທ່ານພູມີ ວົງວິຈິດ ກຳລັງເຊັນສັນຍາຮ່ວມກັນຈັດຕັ້ງຣັຖບາລປະສົມລາວສອງຝ່າຍ ຄັ້ງທີ່ສາມ ທີ່ນະຄອນວຽງຈັນທນ໌ ໃນປີ 1973.*

## ຣັຖບາລ ຊຸດທີ່ 15

ຊຸດສຸດທ້າຍລະຫວ່າງຝ່າຍວຽງຈັນທນ໌ ແລະ ຝ່າຍລາວຄອມມຸຍນິສຕ໌ ປະກອບຂຶ້ນພາຍຫລັງທີ່ມີການຕົກລົງ ບັ້ນສຸດທ້າຍ ເພື່ອຮ່ວມກັນສອງຝ່າຍ. ໃດ້ມີອາຍຸປົການແຕ່ເດືອນມິຖູນາ (June) 1974 ເຖິງວັນທີ່ 2 ເດືອນທັນວາ (December) 1975.

ໃນວັນທີ່ 5 ເດືອນເມສາ (April) 1974, ທຸກຄົນໃນຄນະຣັຖບາລປະສົມສອງຝ່າຍ ໄດ້ເຂົ້າປະຈຳຕຳແໜ່ງຂອງຕົນຢູ່ໃນກະຊວງຕ່າງໆ ຕາມທີ່ໄດ້ຕົກລົງກັນຢູ່ໃນສັນຍາ. ໃນວັນທີ່ 24 ເດືອນພຶສະພາ (May) ປີ 1974 ຄນະມົນຕຣີປະສົມການເມືອງ ໄດ້ລົງມະຕິຮັບເອົາຮ່າງພຣະຣາຊອົງການໆເມືອງ 18 ຂໍ້ ເປັນນະໂຍບາຍການເມືອງຂອງລາວ. ໃນຕົ້ນປີ 1974, ຢູ່ໃນປະເທສຂເມນ ຣັຖະບາລຂອງທ່ານນາຍພົນລອງໂນນ ແລະກອງທັພ ທັງໝົດ ໄດ້ຕົກໃຫ້ຂເມນແດງ. ທ່ານລອງໂນນ ໄດ້ອົພະຍົບໄປຢູ່ປະເທສໄທຍ໌ ແລ້ວຕໍ່ໄປສະຫາຣັຖ. ທ່ານໄດ້ເສັຍຊີວິດຢູ່ໃນສະຫາຣັຖ ບໍ່ດົນຕໍ່ມາ.

<u>ຄນະຣັຖບາລປະສົມສອງຝ່າຍ</u> (ຝ່າຍ ວຽງຈັນທນ໌ ແລະ ຝ່າຍ ລາວຄອມມຸຍນິສ)



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

1. ນາຍພົນສິງກະໂປ ສີໂຄຕຈຸນນະມາລີ ຣ.ມ.ຕ. ໂຍທາທິການ ແລະ ຂົນສົ່ງ (ຝ່າຍແນວລາວຮັກຊາຕ)
2. ພຣະຍາຈິງຮັກຣາຊກອນ ໂງ່ນ ຊະນະນິກອນ ຣ.ມ.ຕ. ກະຊວງຄັງ (ຝ່າຍວຽງຈັນທນ໌)
3. ພຣະຍາພູມີ ວົງວິຈິດ ຮອງນາຍົກຣັຖມົນຕຣີ, ຣ.ມ.ຕ. ກະຊວງ ຕ່າງປະເທສ (ຝ່າຍແນວລາວຮັກຊາຕ)
4. ສເດັຈເຈົ້າກຣົມມະນາ ສຸວັນນະພູມາ ນາຍົກຣັຖມົນຕຣີ (ຝ່າຍວຽງຈັນທນ໌ )
5. ພຣະຍາໄຊຍະເພັຊຣ໌ຈຳພອນ ເຫລື່ອມ ອິນສີຊຽງໃໝ່ ຮອງນາຍົກ ແລະ ຣ.ມ.ຕ. ກະຊວງ ສຶກສາທິການ, ກິລາ, ສິລປະແລະຍຸວະຊົນ (ຝ່າຍວຽງຈັນທນ໌)
6. ພຣະຍາຄຳກິ່ງ ສຸວັນລາສີ ຣ.ມ.ຕ. ກະຊວງຍຸຕິທັມ (ຜູ້ຊີງຄຸນນະວຸທິ ຝ່າຍຣັຖບານວຽງຈັນທນ໌ )
7. ມະຫາກຸ ສຸວັນນະເມທີ ຣ.ມ.ຕ. ກະຊວງ ທັມມະການ (ຝ່າຍແນວລາວຮັກຊາຕ ຫົວໜ້າ 21 ອົງການ ປະທວັງໄລ່ຝ່າຍວຽງຈັນທນ໌ອອກຈາກໜ້າທີ່ )
8. ດຣ. ຄຳໄພ ອາໄພ ຣ.ມ.ຕ. ກະຊວງ ສາທາຣະນະສຸກ (ຝ່າຍ ວຽງຈັນທນ໌)
9. ທ່ານ ສີມຫວັງ ແສນສຖິດ ຣ.ມ.ຕ. ຊ່ວຍ ກະຊວງຍຸຕິທັມ (ຜູ້ຊີງຄຸນະວຸທິຝ່າຍແນວລາວຮັກຊາຕ)
10. ທ່ານຈັນທອນ ຈັນທະລັງສີ ຣ.ມ.ຕ. ຊ່ວຍ ກະຊວງ ການຕ່າງປະເທສ (ຝ່າຍວຽງຈັນທນ໌ )
11. ດຣ. ຄຳລຽງ ພິລເສນາ ຣ.ມ.ຕ. ຊ່ວຍ ກະຊວງ ສາທາຣະນະສຸກ (ຝ່າຍແນວລາວຮັກຊາຕ )
12. ຄຳອ້ວນ ບູບຜາ ຣ.ມ.ຕ. ຊ່ວຍ ກະຊວງປ້ອງກັນປະເທສ (ຝ່າຍ ຄ.ມ.ນ. ຜູ້ຄົ້ນລົ້ມຝ່າຍວຽງຈັນທນ໌)
13. ທ່ານອູ່ນເນື້ອ ພິມມະສອນ ຣ.ມ. ຕ ຊ່ວຍ ກະຊວງ ສຶກສາ, ສິລປະ, ກິລາ, ຍຸວະຊົນ (ຝ່າຍລາວ ຄ.ມ.ນ)
14. ພ ອ. ເດືອນ ສູນນາລາດ ຣ ມ ຕ ຊ່ວຍ ກະຊວງ ມະຫາດໄທ (*ນາຍທະຫາຣທີ່ໄລ່ນາຍພົນກອງແລ ອອກຈາກ ທີ່ງໄຫຫີນ, ເປັນ ຜ.ບ ກອງພັນທະຫານຣາບອາກາສລາວທີ່ 2 ໄດ້ໄລ່ວຽດມິນ ໄປຫາໜອງແຮດຮ່ວມກັບຝຣັ່ງເສສ ແລະທ່ານ ວ່າງປາວ ໃນປີ 1953 ແລະ ໄດ້ຖືກບາດເຈັບ ຢູ່ພູໜອງ ຊຽງຂວາງ , ແມ່ນຝ່າຍກາງ ອ່ຽງຊ້າຍ)*
15. ທ່ານບຸສບົງ ສຸວັນນະວົງສ໌ ຣ.ມ.ຕ. ຊ່ວຍ ກະຊວງ ການຄັງ (ຝ່າຍແນວລາວຮັກຊາຕ )
16. ທ່ານຄຳເພັງ ບູບຜາ ຣ.ມ.ຕ ກະຊວງ ໄປສະນີ ແລະ ໂທຣະຄົມມະນາຄົມ (ຝ່າຍແນວລາວຮັກຊາຕ)
17. ດຣ. ຊົມພູ ອຸດົມວິໄລ ຣ.ມ.ຕ. ຊ່ວຍ ກະຊວງເສຖາກິ ແລະແຜ່ນຜັງ (ຝ່າຍວຽງຈັນທນ໌ )
18. ພຣະຍາດຳຣົງລິທທິໄກ ຕຸບີ ລີຟຸງ ຣ.ມ.ຕ. ຊ່ວຍ ກະຊວງໄປສະນີ ແລະໂທຣະຄົມມະນາຄົມ (ຝ່າຍວຽງຈັນທນ໌)
19. ເຈົ້າສຸກ ວົງສັກ ຣ.ມ.ຕ. ກະຊວງ ຖແລງຂ່າວ,ໂຄສະນາການ ແລະ ທອ່ງທ່ຽວ (ຝ່າຍແນວລາວຮັກຊາຕ) *“ ຜູ້ໄດ້ບອກວ່າ ລາວທຸກຄົນ ຕີນຫວິດດິນໝົດແລ້ວເດີ້ ຕ້ອງຊ່ວຍກັນໄດ.”*


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

20. พระยา สุธะพิลธาຊพັກດີ ສຸກັນ ວິໄລສາຣ ຣ.ມ.ຕ. ກະຊວງປະຊາສົງເຄາະ (ຝ່າຍວຽງຈັນທນ໌)

21. ພນະທ່ານ ເພັງ ພົງສວັນ ຣ.ມ.ຕ. ກະຊວງມະຫາດໄທ (ຝ່າຍວຽງຈັນທນ໌)

22. ພະຍາຮິຣັນຍະພິທັກສ໌ ທູມພັນ ໄຊຍະສິທ ຣ.ມ.ຕ. ຊ່ວຍ ກະຊວງ ໂຍທາທິການ, ຂົນສົ່ງ (ຝ່າຍວຽງຈັນທນ໌)

23. ເຈົ້າສີສຸກ ນະຈຳປາສັກດິ໌ ຣ.ມ.ຕ. ກະຊວງ ປ້ອງກັນປະເທສ ແລະ ນັກລົບເກົ່າ (ຝ່າຍວຽງຈັນທນ໌) ໄດ້ອົພະຍົບ ແລະເສັຍຊີວິດຢູ່ສະຫະຣັຖ ທີ່ຣັຖກາລິຝອກເນັຍໃນປີ 1982 ດວ້ຍໂລກຫົວໃຈຍາມນອນລັບ.

24. ທ່ານອຸໄດ ສຸວັນນະວົງສ໌ ຣ.ມ.ຕ. ຊ່ວຍ ກະຊວງຖແລງຂ່າວ,ໂຄສະນາການ ແລະທອ່ງທ່ຽວ (ຝ່າຍ ວຽງຈັນທນ໌)

25. ທ່ານໂສດ ເພັຊຣ໌ຣາສີ ຣ.ມ.ຕ. ເສຖາກິຈແລະ ແຜ່ນຜັງ (ຝ່າຍແນວລາວຮັກຊາຕຫົວໜ້າ 21 ອົງການ)




*ຮູບທີ່ 168. ຄນະຣັຖບາລປະສົມສອງຝ່າຍ ໃນພຣະຣາຊອານາຈັກລາວ, ອ່ານຊື່ ຕາມລຳດັບເລຂ 1-25*

# ຄນະມົນຕຣີປະສົມການເມືອງ

1 ທ່ານສຸວັນ ຊນະນິຄົມ, 2 ທ່ານບູນທັນ, 3 ວັນນະວົງ ຣາຊກູນ, 4 ເຈົ້າ ສີສຸມັງ ສີສເລີມສັກ, 5 ເຈົ້າສຸພານຸວົງສ໌, 6 ທ່ານຄຳສຸກ ແກ້ວລາ, 7 ທ່ານນາຍພົນ ຄຳອວັນຣາທິກຸນ, 8 ເຈົ້າສີນ ສີນທະວົງສ໌, 9



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ບໍ່ຮູ້ຊື່ , 10 ທ່ານອີ ບິຕະພານິຊ໌,11 ຄຳຝັ້ນ ນອນສວັນ,12 ບໍ່ຮູ້ຊື່ 13 ທ່ານຄຳຫລ້າ ກີ່ງສະດາ,14 ທ່ານຝູງ ລໍ,15 ບໍ່ຮູ້ຊື່ 16 ບໍ່ຮູ້ຊື່ 17 ທ່ານນາຍພິນ ຫູມພັນນໍຣະສີງ,18 ບໍ່ຮູ້ຊື່ 19 ບໍ່ຮູ້ຊື່ 20 ທ່ານພິມ ບູນລືໄຕ, 21 ບໍ່ຮູ້ຊື່, 22 ທ່ານພາ ວົງໄຊຍ໌, 23 ບໍ່ຮູ້ຊື່ , 24 ຍານາງໄພບູນ ພິນເສນາ, 25 ຍານາງຄຳສຸກ ວົງວິຈິດ, 26 ທ່ານ ບູນແຕ່ງ ອິນສີຊຽງໃໝ່, 27 ທ່ານຄຳພັນ ສີມມາລາວົງ,  28 ທ່ານຢາງດາວ, 29 ບໍ່ຮູ້ຊື່, 30 ທ່ານຄຳເຫລັກ ໄຊຍະສິດ, 31 ທ່ານວົງສຸວັນ ບູນສວັດ, 32 ທ່ານເຮັງ ສາຍທະວີ, 33 ທ່ານບູນນາກ ສຸວັນນະວົງ, 34 ທ່ານສລັດ ຣາຊາສັກ, 35 ທ່ານຫູມເພັງ ສຸຂເສີມ, 36 ທ່ານຄຳແພງ ໄຊຍະສິດ, 37 ທ່ານສີສວ່າງ ຈັນເທພາ, 38 ທ່ານວິບູນ ອາໄພຍ໌, 39 ທ່ານສີຫາຣາຊ ຜາສຸກ, 40 ທ່ານຄຳພັນ ມະຫາຈັນ, 41 ທ່ານທ້າວບົວສີ ໂສພາ.



*<u>ຮູບທີ່ 169</u>. ຄນະມົນຕຣີ ປະສົມການເມືອງ ສອງຝ່າຍຂອງລາວໃນສະໃໝ 1974 ໃຫ້ອ່ານຊື່ ຕາມນຳ້ເບີແຕ່ 1-41. ຮູບຖ່າຍຢູ່ຕໍ່ໜ້າ ພຣະບໍຣົມມະຫາຣາຊວັງ ພນະຄອຣຫລວງພະບາງໃນວັນທີ່ 5 ເດືອນເມສາ (April) 1974.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

| ຝ່າຍ ວຽງຈັນ | ຝ່າຍ ແນວລາວຮັກຊາດຄອມມຸຍນິສ |
|---|---|
| 1 ທ່ານນາຍພິນອວັນ ຣາທິກູນ | 1 ສເດັດເຈົ້າ ສູພານຸວົງສ໌ |
| 2 ນາຍພິນຫຸມພັນ ນໍຣະສິງ | 2 ຈານປາວ ວັນທານຸວົງ |
| 3 ເຈົ້າສີຫາຣາຊ ຜາສຸກ | 3 ມະຫາ ຄຳພັນ ວີຣະຈິດ |
| 4 ທ່ານສຸວັນ ຊນະນິຄົມ | 4 ທ່ານຄຳສຸກ ແກ້ວລາ |
| 5 ທ່ານຄຳຝັ້ນ ນວນສວັນ | 5 ທ່ານລໍຝູງ ລໍເປັຍຢ້າວ |
| 6 ທ່ານວັນນະວົງ ຣາຊກຸນ(Lescure) | 6 ທ່ານວີສິດ |
| 7 ເຈົ້າສີສຸມັງ ສີສເລີມສັກ | 7 ທ່ານລຽນ ລິດທິເດດ |
| 8 ທ່ານເຮັງ ສາຍທະວີ | 8 ທ່ານທັມສິນ |
| 9 ທ່ານສລັດ ຣາຊາສັກ | 9 ຍານາງຄຳສຸກ ວົງວິຈິດ |
| 10 ທ່ານຄຳຫລ້າ ກົງສະດາ | 10 ຍານາງໄພບູນ ພິມເສນາ |
| 11 ທ່ານບູນແຕ່ງ ອິນສີຊຽງໃໝ່ | 11 ທ່ານຫລ້າ ສຸສວັນ |
| 12 ທ່ານຢາງດາວ | 12 ທ່ານອີ ບິຕພານິຊຍ໌ |
| 13 ທ່ານບູນທັນ ເຮືອງປະເສີດ | 13 ມະຫາບຸດດີ |
| 14 ເຈົ້າສິນ ສິນທະວົງສ໌ | 14 ທ່ານສະນັນ ສຸດທິຈັກ |
| 15 ທ່ານພິມ ບູນລືໄຕ | 15 ທ່ານຄຳພັນ ສີມມາລາວົງ |
| 16 ທ່ານສຸວັນນີ ພິມພັກດີ | 16 ທ່ານຄຳຕາ ວົງສຸວັນ |

( " ບໍ່ຮູ້ຊື່ "ໃຫ້ເບິ່ງຕາມກາຣຈັດຕັ້ງຢູ່ເທິງ ແລະລຸ່ມນີ້ )

ຄນະຜູ້ຊີງຄຸນນະວຸທີ ມີ ດັ່ງນີ້:

| | |
|---|---|
| 1- ດຣ. ຕານ ປະພັດສະຣັງ | 2- ທ່ານຄຳເຫັລກ ໄຊຍະສິດ |
| 3- ທ່ານຄຳແພງ ໄຊຍະສິດ | 4- ທ່ານຫູມເພັງ ສຸຂເສີມ |
| 5- ທ່ານສີສວ່າງ ຈັນເທພາ | 6- ທ່ານຜາ ວົງໄຊຍ໌ |
| 7- ທ່ານສຸວັນ ບູນສວັດ | 8- ທ່ານສີສຸພັນ ມັງຄະລະ |
| 9- ທ່ານບູນຄົງ ປະດິຈິດ | 10- ທ່ານບູນາກ ສຸວັນນະວົງ |

ໃນວັນທີ່ 3 ເດືອນມິຖຸນາ (June) 1974, ເປັນງວດສຸດທ້າຍ ໃນການຍົກຍ້າຍຄອບຄົວຂອງທະຫານສະຫະຣັຖ ອອກຈາກຣາຊອານາຈັກລາວ. ໃນເດືອນສິງຫາ (August) 1974, ແມ່ນການເດີນຂະບວນຂອງ (ສ.ປ.ປ.ລ.) ປະທວັງຣັຖບາລຝ່າຍຂວາ ຢູ່ໃນນະຄອນວຽງຈັນຫນ໌.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນວັນທີ່ 30 ເດືອນ ເມສາ (April) 1975, ວຽດນາມໃຕ້ໄດ້ເສັຍໃຫ້ຄອມມຸຍນິສຕ໌ວຽດນາມເໜືອຢ່າງສິ້ນເຊີງ ປະຊາຊົນວຽດນາມໃຕ້ຫລາຍລ້ານຄົນ ໄດ້ອົພະຍົບລົບໄພ້ຍຈາກບ້ານເກີດເມືອງນອນຂອງຕົນ ໄປສູ່ຫລາຍປະເທສ ຄື: ປະເທສໄທຍ໌, ມາເລເຊັຽ, ອິນໂດເນເຊັຽ ແລະ ຟີລິບປີນ. ໃນຣະຫວ່າງການເດີນທາງໜີຂອງອົພະຍົບວຽດນາມໃຕ້ ໄດ້ມີອຸປະຕິເຫຕເກີດຂຶ້ນສາຣະພັດທຸກຢ່າງ ຄື: ເຮືອລົ້ມຈົມລົງທະເລ, ຖືກປຸ້ນຈີ້, ຖືກຂົ່ມຂືນ, ຕາຍອຶດຫິວຫລາຍຢ່າງທີ່ໜ້າສົມເພດເວດທະນາທີ່ສຸດ. ເໜືອໄປກວ່ານີ້ ຍັງຖືກຂ້າຕາຍ, ຖືກທໍຣະມາຣ ຢູ່ພາຍໃນປະເທສວຽດນາມ ແລະຢູ່ຕ່າງປະເທສ. ຄົນວຽດນາມໃຕ້ທັງໝົດ ໄດ້ຕາຍໄປເປັນຈຳນວນຫລາຍລ້ານຄົນ ດັ່ງນີ້: ຕາຍຢູ່ໃນສນາມລົບຫລາຍກວ່າ 254,300 ຄົນ, ຕາຍໃນເວລາອົພຍົບໜີຫລາຍກວ່າ 200,000 ຄົນ, ຖືກວຽດນາມ ຄ.ມ.ນ. ເອົາໄປທໍຣະມານ ຂ້າຖິ້ມປະມານ ເຄິ່ງລ້ານຄົນ.

ໃນເດືອນກຸມພາ (February) 1975, ກຳລັງແນວລາວຮັກຊາດ ປະສົມທະຫາຣວຽດນາມເໜືອ ໄດ້ເຂົ້າໂຈມຕີທີ່ໝັ້ນຂອງກອງທັພແຫ່ງຊາຕ (ຝ່າຍຂວາ), ຢ່າງທ້າທາຍ ຮູນແຮງຂຶ້ນ ໄດ້ລະເມີດສັນຍາ ທຸກໆສັນຍາ ທີ່ໄດ້ເຊັນກັນໄວ້.  ໃນເດືອນມີນາ (March) 1975, ກອງທະຫາຣວຽດນາມເໜືອລ້ວນໆ ປະກອບດ້ວຍກອງຣົຖຖັງ, ອາວຸທປືນໃຫ່ຍ, ປືນຕໍ່ຕ້ານອາກາສ ໄດ້ບຸກຝ່າຍຂວາ ແລະເຄື້ອນຕາມເສັ້ນທາງເລຂທີ່ 7 ຈາກທົ່ງໄຫຫີນ ມຸ້ງໜ້າໄປສູ່ຖນົນເລຂທີ່ 13  ທີ່ ສາລາພູຄູນ, ໄດ້ໂຈມຕີສູນກາງ ກອງພົນ ທີ່ 2 ຂອງເຂຕທະຫາຣພາຄ 2 ແຕກແລ້ວ ກໍມຸ່ງໜ້າລົງໄປໃສ່ນະຄອນຫລວງວຽງຈັນທນ໌.

ໃນວັນທີ່ 9 ເດືອນເມສາ (April) 1975, ທ່ານນາຍພົນ ວ່າງປາວ ໄດ້ເຂົ້າໄປເຝົ້າສະເດັດເຈົ້າສູວັນນະພູມາ ນາຍົກຣັຖມົນຕຣີຂອງຣັຖບາລປະສົມ ເພື່ອຂໍປຶກສາກ່ຽວກັບສຖານການທີ່ໄດ້ຮ້າຍແຮງຂຶ້ນ ຢ່າງໜ້າວິຕົກນີ້, ແຕ່ບໍ່ໄດ້ຮັບຄຳຕອບດີຫັຽງເລີຍ ຕ້ອງໄດ້ກັບລ່ອງແຈ້ງ ດ້ວຍຄວາມຜິດຫວັງ.

ໃນວັນທີ່ 11 ເດືອນເມສາ (April) 1975, ທ່ານນາຍພົນ ວ່າງປາວ ໄດ້ເຂົ້າໄປເຝົ້າເຈົ້າຊີວິດສຣີສະວ່າງວັທະນາ ເພື່ອຂໍຮັບສັ່ງ, ແຕ່ກໍບໍ່ໄດ້ຜົນຫັຽງມີແຕ່ຄວາມຜິດຫວັງ.

ໃນວັນທີ່ 13 ເດືອນເມສາ (April) 1975, ສປປລ ສັ່ງຍູບສະພາຜູ້ແທນຣາຊດອນ ແລະໄດ້ປະກາສການເລືອກຕັ້ງຊຸດໃໝ່. ສະພາບການບ້ານເມືອງ ໄດ້ຮ້າຍແຮງຂຶ້ນຍ້ອນກອງທະຫານຂອງ ສປປລ ໂດຍການສນັບສນູນຈາກກຳລັງຂອງ ວຽດນາມເໜືອ ພ້ອມດ້ວຍອາວຸດອັນທັນສມັຍທຸກຢ່າງ ເຂົ້າຍຶດທີ່ໝັ້ນ ຂອງຝ່າຍຂວາ ຢູ່ເມືອງກາສີ ແລະຢູ່ໃນວັງວຽງ ທັງໝົດ.

ໃນເດືອນພືສະພາ (May) 1975, ສະຖາບັນນັກສຶກສາ, ຂ້າຣາຊການ ແລະ ພົນລະເຮືອນ ນຳໂດຍ 21 ອົງການ ໄດ້ທຳການເດີນຂະບວນຕໍ່ຕ້ານ, ຮອ້ງໂຮ, ຂັບໄລ່ ຄນະຣັຖບາລຝ່າຍຂວາ ໃຫ້ອອກຈາກ ໜ້າ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ທີ່ການ.

ໃນວັນທີ່ 14 ເດືອນ ພຶດສະພາ (May) 1975, ກອງທະຫານຂອງຄນະແນວລາວຮັກຊາຕ ປະສົມກຳລັງ ວຽດນາມເໜືອ ເຂົ້າຍຶດກອງບັນຊາການທະຫານພາຄ 2 ທັງໝົດ. ໃນຣະຍະນັ້ນ, ທ່ານນາຍພົນ ວ່າງປາວ ພ້ອມດ້ວຍນາຍທະຫານ ແລະຄອບຄົວ ໄດ້ອົພະຍົບໄປລີ້ໄພຍ໌ຢູ່ສູນນ້ຳພອງ, ຈັງຫວັດຂອນແກ່ນ, ປະ ເທສໄທຍ໌ ເປັນຈຳນວນຫລາຍພັນຄົນ.

ໃນວັນທີ່ 14 ເດືອນພຶດສະພາ (May) 1975, ອົງການຢູເຊດ (USAID) ຕັ້ງຢູ່ນາໄຮ່ດຽວ, ນະຄອນວຽງ ຈັນທນ໌, ໄດ້ຖືກພວກປະທວ້ງ 21 ອົງການ ທຳລາຍທັງໝົດ.

ໃນວັນທີ່ 21-30 ເດືອນພຶດສະພາ (May) 1975, ຈື່ງມີການຕົກລົງກັບສະຖານທຸຕຂອງສະຫາຣັຖ ໃຫ້ ຖອນການຊ່ວຍອອກຈາກລາວ ແລ້ວພວກປະທ້ວງ 21 ອົງການ ຈື່ງໄດ້ເລີກຖອຍອອກໄປຈາກສະຖານທີ່ ຂອງຢູເສດ ໃນວັນທີ່ 30 ເດືອນ ມິຖຸນາ (June) 1975.

ໃນວັນທີ່ 7 ເດືອນກໍຣະກະດາ (July) 1975, ການປະທະກັນໃນຣະຫວ່າງເຈົ້າໜ້າທີ່ຂອງໄທຍ໌ ແລະເຈົ້າ ໜ້າທີ່ຂອງ ສປປລ ຢູ່ແມ່ນ້ຳຂອງ ເໜືອບ້ານສີຖານໃຕ້ ເປັນຄັ້ງທີ່ນື່ງ.

ໃນວັນທີ່ 8 ເດືອນກໍຣະກະດາ (July) 1975 ນາຍທະຫານກອງທັບແຫ່ງຊາຕ, ນາຍຕຳຣວດ, ຂ້າ ຣາຊ ການຊັ້ນຜູ້ໃຫ່ຍຝ່າຍຂວາ ໄດ້ຖືກຫລອກໄປໂຮມກັນຢູ່ຄ້າຍຈີໄນໂມ້ ນະຄອນວຽງຈັນທນ໌ແລ້ວ ຖືກ ກວດ ລ້າງສົ່ງໄປໃສ່ສູນສັມມະນາດັບສ້າງ (ຄຸກ) ຢູ່ວຽງໄຊ, ແຂວງຫົວພັນ ທັງໝົດຫລາຍ ພັນຄົນ.

ໃນເດືອນສີງຫາ (August ) 1975, ນາຍພົນຄຳອ້ວນ ບູບຜາ (ລາວແດງ) ຣັດຖມົນຕຣີຊ່ວຍ ກະຊວງ ປ້ອງກັນປະເທສ ໄດ້ສັ່ງໃຫ້ກຳລັງຂອງຕົນຍຶດອຳນາດທັງໝົດ ຢູ່ໃນນະຄອນວຽງຈັນທນ໌ ແລະທົ່ວທຸກ ແຂວງໃນຣາຊອານາຈັກລາວ.

ໃນວັນທີ່ 23 ເດືອນສີງຫາ (August) 1975, ລາວຄອມມຸຍນິສຕ໌ ຍຶດອຳນາຕທັງໝົດໃນນະຄອນວຽງ ຈັນທນ໌. ຂ້າຣາຊການ, ນາຍທະຫານ, ນາຍຕຳຣວດ ຊັ້ນຜູ້ໃຫ່ຍ, ໄດ້ຖືກຫລອກໄປເຂົ້າສູນດັດສ້າງຢູ່ ເມືອງວຽງໄຊ ແຂວງຫົວພັນ ໄດ້ຖືກທໍຣະມານດ້ານຈິດໃຈ, ດ້ານຮ່າງກາຍ, ອຶດຫີວ, ຖືກໃສ່ຢາ, ຂ້າຖີ້ມ, ລົ້ມຕາຍ ເມື່ອໝົດກຳລັງ ຢ່າງໜ້າສົງສານທີ່ສຸດ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ດ້ວຍຄວາມເສັຍສຣະ ຄວາມສັດຊື່ຕໍ່ປະເທສຊາຕບ້ານເມືອງ ຄນະຣັຖມົນຕຣີຝ່າຍວຽງຈັນທນ໌ ຈຶ່ງຍອມໄປສັມມະນາ ແຕ່ໃນທີ່ສຸດ ກໍຖືກຫັກຫລັງຈາກຝ່າຍຄອມມຸຍນິສ ແມ່ນແຜນການຂອງໄກສອນ ພົມວິຫານ ແລະ ນາຍຄຳອ້ວນບູບຜາ ທີ່ໄດ້ຮັບໃຊ້ ນະໂຍບາຍຂອງ ຄ.ມ.ນ. "ພັຄ ອິນດູຈີນ" ສັ່ງໃຫ້ດັດສູນຄົນລາວ ທຸກເຜົ່າພັນ ເພື່ອຈະໄດ້ຍຶດເອົາເມືອງລາວເປັນຂອງພັຄ ແລະ ແຜນການແກ້ແຄ້ນ ຂ້າຝ່າຍຂວາໃຫ້ໝົດ ຢ່າງອະທັມ ແລະ ເຖື່ອນທີ່ສຸດໃນໂລກ ຈຶ່ງໄດ້ບັນທຶກໄວ້ ເພື່ອຊັກຊວນລາວທຸກຄົນ ໃຫ້ຮູ້ ແລະ ເຫັນຄວາມໂຫດຫ້ຽມ ຄວາມອະທັມຂອງລາວ ຄ.ມ.ນ. ໃຫ້ໄດ້ຈົດຈຳໄວ້ເປັນບົດຮຽນ ບໍ່ໃຫ້ຖືກຫລອກ ອີກ ແລະ ໃຫ້ລະລຶກເຖິງ ຄວາມເສັຍສະຣະ ຂອງຜູ້ນຳ ທີ່ໄດ້ຖືກໄປທໍຣະມານ ຢ່າງໂຫດຮ້າຍນີ້. ໃຫ້ລາວເຮົາທຸກຄົນ ທີ່ໄດ້ລອດຊີວິດມາ ຈົ່ງໄວ້ອາໄລເຖິງດວງວິຍານ ຂອງເພິ່ນທຸກຄົນ ຈົ່ງໄດ້ໄປໃນພິພົພ ອັນສູງສົ່ງ ຢູ່ເທິງ ສວັນຊັ້ນຟ້າ ດ້ວຍເທີ້ນ.

ໃນເດືອນກັນຍາ (September) 1975, ສປປລ ໄດ້ປະກາສຈັບກູມ, ຕັດສິນປະຫານຊີວິດ ແລະຈຳຄຸກຕລອດຊີວິດຄນະຣັຖບາລ, ນາຍທະຫາຮ ຂອງຝ່າຍວຽງຈັນທນ໌ ດັ່ງຕໍ່ລົງໄປນີ້:

<u>ຕັດສິນປະຫານຊີວິດມີ 6 ທ່ານ ຕາມຮູບແຖວທີ່ໜຶ່ງ ລຸ່ມນີ້</u>

1- ທ່ານ ຜຸຍ ຊະນະນິກອນ
2- ສະເດັຈ ເຈົ້າບູນອູ້ມ ນະຈຳປາສັກ
3- ທ່ານນາຍພົນ ວ່າງປາວ
4- ທ່ານນາຍພົນ ກຸປຣະສິດ ອາໄພຍ໌
5- ທ່ານນາຍພົນ ອຸດອນ ຊະນະນິກອນ
6- ທ່ານນາຍພົນ ທົງລິດ ໂຈກເບົ້ງບູນ .



*<u>ຮູບທີ່ 170</u>. ແຖວເທິງແມ່ນຄນະທີ່ຖືກຕັດສິນປະຫານຊີວິດ: ທ່ານຜຸຍຊະນະນິກອນ, ສເດັຈເຈົ້າບູນອູ້ມ, ນາຍພົນ ວ່າງປາວ, ນາຍພົນ ກຸປຣະສິດອາໄພ໌ຍ, ທ່ານອຸດອນຊະນະນິກອນ, ທ່ານນາຍພົນ ທອງລິດ ໂຈກເບົ້ງບູນ. ແຖວລຸ່ມ ແມ່ນຄນະທີ່ຖືກຕັດສິນ ຈຳຄຸກຕລອດຊີວິດ: ທ່ານນາຍພົນສີລັກ ປະຖັມມະວົງ, ທ່ານນາຍພົນແອຕ່ຳ ສິງວົງສາ, ພນະທ່ານ ສີສຸກນະຈຳປາສັກ, ພນະທ່ານ ໂງ່ນຊນະນິກອນ, ແລະທ່ານເຈົ້າສອບໄຊຊະນະ ສຸດທະກະກູນມາຣ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**<u>ຕັດສິນ ຈຳຄຸກຕລອດຊີວິດມີ 5 ທ່ານ ຕາມຮູບແຖວທີ່ສອງຂ້າງລ່າງນີ້</u>**

1- ທ່ານນາຍພິນ ສີລັກ ປະຖັມມະວົງ 2- ທ່ານນາຍພິນ ແອຕ່ຳ ສີງວົງສາ
3- ພນະທ່ານ ສີສຸກ ນະຈຳປາສັກ 4- ພນະທ່ານ ໂງ່ນ ຊະນະນິກອນ ແລະ
5- ພນະທ່ານເຈົ້າ ສອບໄຊຊະນະ ສຸດທະກະກູມມາຣ.

**<u>ຕັດສິນຈຳຄຸກ 20 ປີ ມີ 20 ທ່ານ ຄື:</u>**

1- ທ່ານຄຳແດງ ຊະນະນິກອນ 2- ທ່ານຄຳສີງ ຊະນະນິກອນ
3- ທ່ານສະກູນ ຊະນະນິກອນ 4- ທ່ານລິມເພັດ ລິດສັອນ
5- ທ່ານເຮືອງ ສີຫາຣາດ 6- ທ່ານຜາດີ
7- ທ່ານອາຣິຍະ ພິມມະສອນ 8- ທ່ານທັດສະດີ ສີນໄຊ
9- ທ່ານອິ້ນ ຊະນະນິກອນ 10- ທ່ານບູນມີ ຊະນະນິກອນ
11- ທ່ານວັນຖາ ພານຄຳ 12- ທ່ານລູນ ສີສຸນິນ
13- ທ່ານສຸດໃຈ ວົງສວັນ 14- ທ່ານບົວທອງ ໂພທິວົງສາ
15- ທ່ານຄຳສີ ຊະນະນິກອນ 16- ທ່ານຄຳຮູ້ ບຸດສະຣາດ
17- ທ່ານຄຳໄຜ່ ອະພັຍ 18- ທ່ານຫູມພັນ ໄຊຍະສິດ
19- ທ່ານຈັນທອນ ຈັນທະລາສີ 20- ທ່ານຄຳຄອ່ງ ວົງນະຣາດ.

ໃນວັນທີ່ 5-13 ເດືອນ ພຶສຈິກາ (November) 1975, ເລືອກຕັ້ງຄນະຜູ້ນຳທອ້ງຖິ່ນ ໄປເປັນສະພາທີ່ປຶກສາຂອງ ສປປລ, (ປະກົດວ່າມີແຕ່ພວກທີ່ເຄີຍຕໍ່ສູ້ ຢູ່ໃນປ່າມາ, ຂາດຄວາມຮູ້ ຈະເປັນທີ່ປຶກສາ ໄດ້ແນວໃດກໍ່ບໍ່ຮູ້). ຄວາມຈິ່ງແລ້ວ ແມ່ນແຜນເລືອກເອົາຄົນແກວຄອມມຸຍນິສຕ໌ ມາຊັບຊອ້ນຢູ່ໃນການປົກຄອງຂອງລາວ ຄ.ມ.ນ. ເພື່ອຕິດຕາມການເຄື່ອນໄຫວຕ່າງໆຂອງຄົນລາວ ທົ່ວໄປໃນປະເທສ ຕຽມເພື່ອຫາເຣື່ອງໃສ່ ແລ້ວຈັບເອົາໄປໃສ່ສູນສັມມະນາດັດສ້າງໃຫ້ສາບສູນໄປ ແລ້ວແກວຈະໄດ້ມາແທນຄົນລາວ.

ໃນວັນທີ່ 17 ເດືອນພຶສຈິກາ (November) 1975, ໄທຍ໌ ປິດຊາຍແດນ ລະຫວ່າງສອງປະເທສ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນວັນທີ່ 20-23 ເດືອນພຶສຈິກາ (November) 1975, ລາວຄອມມຸຍນິສ ຄັດເລືອກຜູ້ປົກຄອງເມືອງ ແລະແຂວງ ເຂົ້າຮ່ວມໃນວົງການປົກຄອງອີກ, ແຕ່ກໍແມ່ນ ເລືອກເອົາ ແກວຄອມມຸຍນິສ ພັຄອິນດູຈີນ ເຂົ້າໄປສັບຊອ້ນຢູ່ໃນທຸກໆກະຊວງການປົກຄອງຂອງ ສປປລ ອີກ ເພື່ອວາງແຜນກືນກິນລາວ ຢ່າງ ຖາວອນ.

ໃນວັນທີ່ 28 ເດືອນພຶສຈິກາ (November)1975, ພັຄລາວຄອມມຸຍນິສ ໄດ້ປະກາສລົບລ້າງ ການ ປົກຄອງແບບຣາຊາທິປະໄຕ ໄປເປັນ ສປປລ ແມ່ນໂຄ່ນລົ້ມລັດທິສັກດີນາ ໄປເປັນລັດທິ ຄອມມຸຍນິສ.

ໃນວັນທີ່ 1-2 ເດືອນ ທັນວາ (December) 1975, ຜູ້ຕາງໜ້າພັຄຄອມມຸຍນິສຕ໌ລາວ ໄດ້ເປີດປະຊຸມລັບ ໆ ເພື່ອວາງແຜນລົບລ້າງຣັຖບານປະສົມຊຸດທີ່ສາມ ແມ່ນສເດັຈເຈົ້າສຸວັນນະພູມາ ເປັນນາຍົກຣັຖະ ມົນ ຕຣີ ແລະຮັບເອົາການເສັຍສະຣະບັນລັງ ຂອງເຈົ້າຊີວິດ ສຣີສວ່າງວັດທະນາ. ໃຫ້ຮັບຮອງເອົາ ລະບອບ ການປົກຄອງແບບໃໝ່ ທີ່ເອີ້ນວ່າ ສປປລ.

ໃນວັນທີ່ 1 ເດືອນ ມັງກອນ (January) 1976, ປະເທສໄທຍ໌ໄດ້ເປີດຊາຍແດນຄືນ ລະຫວ່າງສອງປະ ເທສ ສອງແຫ່ງເພື່ອເປັນທີ່ຜ່ານເຂົ້າແລະອອກ ຂອງສອງປະເທສ. ຜູ້ໃດລະເມີດແມ່ນ ຖືກຍິງ ຫລື ຖືກ ຈັບເຂົ້າຄຸກ.

ໃນເດືອນມັງກອນ ແລະເດືອນກຸມພາ (January and February) 1976, ໄກສອນ ພົມວິຫານ ໄດ້ໄປ ຮັບຄຳສັ່ງຢູ່ທີ່ຮາໂນ້ຍ, ວຽດນາມເໜືອ, ໃຫ້ປະຕິບັດຕາມຫລັກການຂອງສັງຄົມນິຍົມຢູ່ໃນລາວ.

ໃນເດືອນພຶດສະພາ (May) 1976, ກອງປະຊຸມ ສປປລ ເພື່ອວາງແຜນການຕາມຄຳສັ່ງສູນກາງພັຄ ໃຫ້ ປະຕິບັດຕາມລັກການ ຂອງການປະຕິວັຕ ສັງຄົມນິຍົມຢູ່ໃນລາວ, ແມ່ນ ສັ່ງໃຫ້ຈັບກຸມຜູ້ນຳ ແລະ ຂ້າ ຣາຊການຝ່າຍຂວາ ຫລາຍພັນຄົນທີ່ບໍ່ເຄົາຣົບຕໍ່ຫລັກການສັງຄົມນິຍົມ, ໃຫ້ເອົາໄປດັດສ້າງ, ຫລື ສັມມະ ນາເພີ້ມ,ແບບນັກໂທສ. ບາງຄົນກໍໄດ້ກັບບ້ານ ແຕ່ກາຍເປັນຄົນພິການ, ສ່ວນຫລາຍແມ່ນໄດ້ຫາຍສາບ ສູນໄປ ບໍ່ມີໂອກາສໄດ້ກັບບ້ານ ແລະຄອບຄົວບໍ່ໄດ້ຮູ້ຂ່າວຄາວນຳເລີຍ.

ໃນເດືອນ ກຸມພາ (February) 1976, ສະຫາຣັຖ ເລີ່ມຮັບເອົາຊາວອົພຍົບລາວ ຢູ່ສູນວິໄນປະເທສໄທ໌ຍ. ລູ້ນທຳອິດແມ່ນເລືອກເອົາອົພະຍົບຄົນລາວ ຜູ້ທີ່ໄດ້ຮ່ວມງານກັບສະຫາຣັຖ ຄືພະນັກງານຢູເຊດ (USAID), ນາຍພາສາປາງສິງຄາມ. ລູ້ນທີ່ສອງ ແມ່ນຊາວຄຣິສສະຕຽນໃນສະຫາຣັຖ ຍິນດີຕອ້ນຮັບເອົາ ຊາວຄຣິສສຕຽນທີ່ອົພະຍົບໄປຈາກລາວ. ຕໍ່ໄປຈື່ງແມ່ນນາຍແລະພົນທະຫານ ທີ່ໄດ້ຮ່ວມການຕໍ່ສູ້ ຄ.ມ.ນ. ກັບສະຫາຣັຖ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເດືອນກໍລະກະດາ (July) 1976, ດິນຟ້າອາກາສ ຢູ່ໃນ ສປປລ ຖືກແຫ້ງແລ້ງ ພາໃຫ້ ການເກັບກ່ຽວ ເຄື່ອງປູກ ຕົກຕໍ່າຫລາຍທີ່ສຸດ, ປະຊາຊົນ ທຸກຈົນ ຢ່າງບໍ່ເຄີຍມີມາແຕ່ກ່ອນ.

ໃນວັນທີ່ 1 ເດືອນມີນາ (March) 1977, ທ່ານສີທົນ ກົມມາດາ ຜູ້ນໍາຊົນຊາດຊົນເຜົ່າລາວເທີງ ທີ່ເປັນ ສະມາຊິກຢູ່ໃນພັດຄອມມຸຍນິສອິນດູຈີນ ມາດົນນານ ໄດ້ເສັຍຊີວິດດ້ວຍໂຣກສາລາ.

ໃນຕົ້ນປີ 1977, ໜ່ວຍກອງໂຈນຕໍ່ຕ້ານຣັຖບາລ ຄ.ມ.ນ. ໄດ້ທໍາການເຄື່ອນໄຫວຢູ່ໃກ້ໆ ຕົວເມືອງຫລວງ ພຣະບາງ. ໃນຣະຍະນັ້ນ ເຈົ້າໜ້າທີ່ຂອງ ລາວ ຄ.ມ.ນ. ໄດ້ປິດລ້ອມທີ່ພັກ (ບ້ານນ້ອຍໆ) ຂອງອາດີດເຈົ້າ ຊີວິດ ສຣີສວ່າງວັດທະນາ ແລະໄດ້ທໍາການຈັບກູມຕົວພະອົງ ພ້ອມດ້ວຍພຣະຍາຕິວົງສ໌ ທັງໝົດສົ່ງໄປ ຄູມຂັງຢູ່ໃນຄຸກໃຕ້ດິນ ທີ່ເມືອງວຽງໄຊ, ແຂວງຫົວພັນ.

ໃນວັນທີ່ 19-20 ເດືອນມີນາ (March) 1977, ສະຫາຣັຖ ໄດ້ສົ່ງທີມໄປຄົ້ນຄ້ົວທະຫານສະຫາຣັຖທີ່ໄດ້ ຫາຍສາບສູນຢູ່ໃນລາວ.

ໃນເດືອນກໍລະກະດາ (July) 1977, ດິນຟ້າອາກາສຢູ່ໃນ ສປປລ ຖືກແຫ້ງແລ້ງເປັນຄັ້ງທີ່ສອງ ໄດ້ເຮັດ ໃຫ້ການເກັບກ່ຽວ ຕົກຕໍ່າຫລາຍທີ່ສຸດ ປະຊາຊົນທຸກຍາກຢູ່ແລ້ວ ຍິ່ງທຸກຈົນເຂົ້າອີກ.

ໃນວັນທີ່ 18 ເດືອນກໍລະກະດາ (July) 1977, ໄກສອນ ພົມວິຫານ ແລະເລດວນ (Leduan) ເລຂາທິ ການພັກ ຄ.ມ.ນ. ວຽດນາມເໜືອ ໄດ້ຕົກລົງເຊັນສັນຍາ ຂໍ້ຜູກມັດ ມິຕະພາບ ລາວ/ວຽດໄດ້ມອບ ອໍາ ນາດໃຫ້ ວຽດນາມ ຄ.ມ.ນ. ມາຄູ້ມຄອງລາວ (ປົກຄອງ ລາວເປັນນາຍລາວ ທາງອ້ອມ) ກໍານົດ 25 ປີ, ຈາກນັ້ນ ກໍຕ້ອງເຊັນຕໍ່ ເທື່ອລະ10 ປີ ໃນເມື່ອພັກຍັງເຫັນພ້ອມ ການຕົກລົງ ກໍເປັນອັນວ່າ ສັນຍາ ດັ່ງກ່າວ ຕ້ອງສືບຕໍ່ຕລອດໄປຢ່າງບໍ່ມີທີ່ສີ້ນສຸດ. ສປປລ ຈື່ງບໍ່ຈໍາເປັນຕ້ອງມີກອງທັພ ມີແຕ່ຕໍາຣວດ ແລະ ທະຫາຣ ບ້ານ ຄັດປືນ ເອເຄ (AK 47) ຍິງໄກໄດ້ 25 ຫລາ ແລະ ປືນຊັ້ນ ຕໍາຣວດ ເທົ່ານັ້ນ.

ລາວ ຄ.ມ.ນ. ຕ້ອງຍອມຈໍານົນທຸກຢ່າງ ບໍ່ມີຂໍ້ແກ້ໄຂໄດ້ໃຫ້ວຽດນາມເໜືອ ເປັນຜູ້ບົງການທຸກຢ່າງມາ ຈາກ "ພັຄ ຄ.ມ.ນ. ອິນດູຈີນ" ແມ່ນວຽດນາມເໜືອ ເປັນນາຍຂອງລາວ ແລະ ຂເມນ ເພາະຕິດໜີ້ເລືອດ ຂອງ ວຽດນາມເໜືອ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ສົນທິສັນຍາລະຫວ່າງໄກສອນແລະເລດວນ

*ສົນທິສັນຍາມິດພາບ ແບບພິເສສ ແລະ ກ່ຽວກັບການຮ່ວມມືຣະຫວ່າງ ລາວແລະວຽດນາມ ອັນມີ ໄກສອນພົມວິຫານ ເລຂາທິການ ພັຄປະຊາຊົນປະຕິວັຕລາວ (ພັຄ ສປປ ລາວ) ແລະທ່ານ ເລດວນ (Le Duan) ເລຂາທິການພັຄວຽດນາມ ຄ.ມ.ນ. ຊຶ່ງໄດ້ເຊັນກັນ ໃນວັນທີ່ 18/07/1977 ມີຂໍ້ ຜູກມັດສັນຍາໄວ້ 25 ປີ, ຈາກນັ້ນກໍ ຕ້ອງຕໍ່ເທື່ອລະ 10 ປີ ໃນເມື່ອສອງພັຄຍັງເຫັນພ້ອມ ແລະຕົກລົງ. ກໍເປັນອັນວ່າ ສັນຍາດັ່ງກ່າວນັ້ນ ຈະສືບຕໍ່ຕລອດໄປ ຢ່າງບໍ່ມີທີ່ສິ້ນສຸດ. ສົນທິສັນຍາດັ່ງກ່າວ ເປັນການ ເສັຍປຽບ ຂອງຝ່າຍລາວ ເພາະທຸກສິ່ງທຸກຢ່າງລາວ ກໍຕ້ອງຂຶ້ນກັບວຽດນາມ ໂດຍບໍ່ຮູ້ສຶກຕົວ ດັ່ງຂໍ້ຄວາມ ເນື້ອໃນ ສັນຍາດັ່ງນີ້:*

*"ຮັບຮູ້ຢ່າງເລິກເຊິ່ງວ່າສາຍພົວພັນທ໌ແບບພິເສຕຣະຫວ່າງ ລາວ/ວຽດນາມ ໃນຄວາມສາມັຄຄີແບບສ຺ູ້ຮົບແລະໄມຕຣີຈິຕມິຕພາພ ອັນບໍ່ມີສິ່ງໃດສັ່ນສະເທືອນໄດ້ ຣະຫວ່າງປະຊາຊົນລາວກັບປະຊາຊົນວຽດນາມ."*

*ນ້ຳໃຈແຫ່ງຄວາມເປັນສະຫາຍອັນຍິ່ງໃຫ່ຍ ຣະຫວ່າງພັຄປະຊາຊົນປະຕິວັຕລາວ ກັບພັຄ ຄ.ມ.ນ. ວຽດນາມ ທີ່ໄດ້ຮັບການຫລໍ່ຫລອນ ມາເປັນເວລາຫລາຍສິບປີ ໃນການຮ່ວມທຸກຂ໌ ຮ່ວມສຸຂນຳກັນ ສູ້ລົບພ້ອມກັນ ເອົາໄຊຊະນະ ສັດຕູ ຜູ້ລຸກລານ ໃນການຮວ່ມມື ແລະການຊ່ວຍເຫລືອຊຶ່ງກັນ ແລະກັນ ຂອງສອງປະເທສຊາຕບ້ານເມືອງນີ້ ແມ່ນມູລເຊື້ອອັນປະເສີຖເລີດລ້ຳອັນໜຶ່ງ ແມ່ນກຳລັງແຮງ ຊນະເລີດ ຂອງທັງສອງພັຄ ແມ່ນພຶຕຕິກັມ ອັນມີຊີວິຕຊີວາອັນໜຶ່ງ ແມ່ນກົດເກນຂຍາຍໂຕຂອງການປະຕິວັຕລາວ /ວຽດນາມ. ຖືວ່າເປັນການເພີ່ມທະວີຄວາມສາມັຄຄີ ອັນສນິທແໜ້ນ ແລະການພົວພັນທ໌ ຮ່ວມມືຢ່າງ ຍາວນານ ໃນທຸກດ້ານ ຣະຫວ່າງລາວ/ວຽດນາມນັ້ນ ເປັນການຕອບສນອງຄວາມມຸ່ງມາດປາຖນາ ອັນແຮງກ້າ ແລະ ຜົລປະໂຍຊນ໌ແຫ່ງການຢືນຍົງຄົງໂຕ ຂອງປະຊາຊົນແຕ່ລະປະເທສ ໃນພາຣະກິຈ ປົກປັກຮັກສາເອກຣາຊແຫ່ງຊາຕ ປະຊາທິປະໄຕ໌ຍ ສັນຕິພາພ ຄວາມເປັນກາງ ຢ່າງແທ້ຈິງ ຂອງປະຊາຊົນບັນດາປະເທສໃນເອເຊັຍອາຄະເນ ສອດຄອ່ງ ກັບຜົລປະໂຍຊ໌ນຂອງປະຊາຊົນທົ່ວໂລກ ທີ່ກຳລັງຕໍ່ຕ້ານລັທທິຈັກກະພັດ ຕ້ານລັທທິລ່າເມືອງຂຶ້ນ ແບບເກົ່າແລະໃໝ່ ເພື່ອສັນຕິພາພ ເອກຣາຊ ແຫ່ງຊາຕ ປະຊາທິປະໄຕຍ໌ ແລະຄວາມກ້າວໜ້າທາງສັງຄົມ."*

*ໂດຍຄວາມຈົ່ງຮັກພັກດີ ຕໍ່ລັທທິມາກ-ເລນິນສືບຕໍ່ ເຊີດຊູຄັນທູງເອກຣາຊແຫ່ງຊາຕ ແລະ ສັງຄົມນິຍົມສົມທົບ ຣະຫວ່າງລັທທິ ຮັກຊາຕອັນແທ້ຈິງ ກັບລັທທິສາກົລກັມມາຊີພ (Proletarian Inter-nationalism) ຢ່າງເປັນເນື້ອດຽວ ອອກແຮງປົກປັກຮັກສາສາຍສັມພັນທ໌ ແບບພິເສສ ຣະຫວ່າງ ລາວ-ວຽດນາມ ເຮັດໃຫ້ປະເທສທັງສອງ ທີ່ເຄີຍມີການຜູກພັນທ໌ກັນ ໃນພາຣະກິຈປົດປ່ອຍຊາຕ ມາ ແລ້ວນັ້ນ ຈະຜູກ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

*ພັນທ໌ກັນແໜ້ນເຂົ້າຕື່ມ ໃນພາຣະກິຈກໍ່ສ້າງ ແລະປົກປັກຮັກສາປະເທສຊາຕບ້ານເມືອງ ຕລອດ ກາລະນານ.*

*ໂດຍເປັນເອກສັນກັນວ່າ ແນວທາງເອກຣາຊ ເປັນເຈົ້າຕົນເອງ ແລະການນຳອັນຖືກຕ້ອງ ຂອງພັຄ ປະຊາຊົນລາວ ແລະ ພັຄຄອມມຸຍນິສຕ໌ວຽດນາມ ມູລເຊື້ອສາຍມັຄຄີ ອັນດູດດື່ມ ຣະຫວ່າງສອງຊາຕ ໄຊຊະນະອັນຄົບຖວ້ນ ຂອງທັງສອງຊາຕ ໃນພາຣະກິຈຕ້ານຈັກກະພັດ ຜູ້ຮຸກຮານຈຸດໝາຍຂອງປະຊາຊົນປະເທສທັງສອງ ຕ່າງກໍສູ້ຣົບ ເພື່ອລັທທິສັງຄົມນິຍົມນັ້ນ ເປັນຂໍ້ພື້ນ ຖານຄວາມໝາຍຂອງສາຍ ພົວພັນທ໌ແບບພິເສສ ຣະຫວ່າງລາວ-ວຽດນາມ.*

*ບົນຈິຕໃຈຂອງຖແລງການຮ໌ຮ່ວມລາວ-ວຽດນາມໃນວັນທີ່ 11/02/76 ໂດຍອີງໃສ່ຈຸດປະສົງຄ ເພີ່ມທະວີຄວາມສາມັຄຄີ ການຮ່ວມມືກັນຍາວນານ ແລະຊ່ວຍເຫລືອຊຶ່ງກັນແລະກັນ ໃນພາຣະກິຈກໍ່ສ້າງ ແລະປົກປັກຮັກສາປະເທສຊາຕບ້ານເມືອງ ເພື່ອຄວາມເປັນເອກຣາຊ ແລະວັທນາຖາວອຣ ຂອງແຕ່ລະປະເທສປະກອບສ່ວນ ເຂົ້າໃນການປົກປັກຮັກສາ, ປັບປຸງສັນຕິພາພ ຢູ່ໃນເອເຊັຍອຄະເນແລະໃນໂລກ, ໄດ້ຕົກລົງເຊັນສົນທິສັນຍາສບັບນີ້ ແລະໄດ້ຕົກລົງກັນກ່ຽວກັບຂໍ້ຄວາມດັ່ງຕໍ່ໄປນີ້:*

*<u>ມາຕຣາ 1</u> ສອງຝ່າຍໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະອອກແຮງປົກປັກຮັກສາ ແລະຂຍາຍສາຍພົວພັນທ໌ແບບພິເສສ ຣະຫວ່າງລາວ / ວຽດນາມ ບໍ່ໄດ້ລົດລະໃນການທະວີຄວາມສາມັຄຄີ ເຊື່ອຖືຊຶ່ງກັນແລະກັນ ການຮ່ວມມືຢ່າງຍາວນານຊ່ວຍເຫລືອ ຊຶ່ງກັນ ແລະກັນໃນທຸກດ້ານ ບົນພື້ນຖານ ລັທທິສາກົລ ກັມມາຊົບ ແລະ ຕາມຫລັກການ ສເມີພາພຢ່າງສົມບູນຣ໌ ເຄົາຣົພເອກຣາຊ ອະທິປະໄຕຍ໌ ແລະ ແຜ່ນດິນ ອັນຄົບຖວ້ນຂອງກັນ ເຄົາຣົພຜົລປະໂຍຊນ໌ ອັນຊອບທັມຂອງກັນ ບໍ່ແຊກແຊງ ເຂົ້າກິຈການ ພາຍ ໃນຂອງກັນ ແຕ່ລະຝ່າຍ ອອກແຮງອົພຣົມ ສຶກສາທົ່ວພັຄ ທົ່ວກອງທັພ ທົ່ວປວງຊົນຂອງຕົນ ໃຫ້ຖນອມ ປົກປັກຮັກສາ ແລະ ເສີມສ້າງ ສາຍພົວພັນທ໌ ແບບພິເສສ ຣະຫວ່າງລາວ/ວຽດນາມ ໃຫ້ຜອ່ງໃສ ໝັ້ນຄົງ ແໜ້ນໜາ ຕລອດກາລະນານ.*

*<u>ມາຕຣາ 2</u>  ບົນພື້ນຖານທີ່ວ່າ ການປົກປັກຮັກສາ ຄວາມເປັນເອກຣາຊ ແຫ່ງຊາຕ ແລະຮັກສາຄວາມສງົບສຸຂຂອງປະເທສຊາຕ ເປັນພາຣະກິຈຂອງປະຊາຊົນ ແຕ່ລະປະເທສ ສອງຝ່າຍ ໃຫ້ຄຳໝັ້ນສັນ ຍາວ່າ ຈະໃຫ້ຄວາມສນັບສນູນ ແລະຊ່ວຍເຫລືອຊຶ່ງກັນ ຢ່າງສຸດອົກສຸດໃຈ ຮ່ວມມືກັນ ຢ່າງແໜ້ນແຟ້ນ ເພື່ອມູ່ງໝາຍເພີ່ມທະວີ ຄວາມສາມາຖ ໃນການປ້ອງກັນ ໃນການປົກປັກຮັກສາ ຄວາມເປັນເອກຣາຊ ອະທິປະໄຕຍ໌ ແລະ ຜືນແຜ່ນດິນ ອັນຄົບຖວ້ນ ແລະ ປ້ອງກັນສັນຕິພາພ ຂອງປະຊາຊົນຜູ້ອອກແຮງງານ ຕ້ານທຸກເລ່ກົລ ແລະການກະທຳ ອັນເປັນການທຳລາຍ ຂອງຈັກກະພັດ ແລະ ກຳລັງປະຕິການນອກປະເທສ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

*<u>ມາດຕຣາ 3</u>  ເພື່ອເປັນການອຳນວຍຄວາມສະດວກ ໃຫ້ແກ່ການຊ່ວຍເຫລືອກັນ ຜ່ານຜ່າຄວາມຍຸ້ງຍາກ ເສີມຂຍາຍຮາກຖານ ພລັງທາງວັດຖຸຂອງປະເທສ ໃຫ້ມີປະສິທທິພາພເຕັມທີ່ ມຸ່ງໝາຍ ກໍ່ສ້າງ ປະເທສ ຊາຕ ບ້ານເມືອງໃຫ້ເຂັ້ມແຂງ ກໍ່ສ້າງຊີວິຕຄວາມເປັນຢູ່ ໃຫ້ອີ່ມໜຳສຳຣານ ສົມບູຣນ໌ພູນສຸຂນັ້ນ ສອງ ປະເທສຈະຕ້ອງເພີ່ມທະວີການພົວພັນທ໌ ຮ່ວມມືກັນ ແບບສັງຄົມນິຍົມ ຕ່າງຝ່າຍ ຕ່າງໄດ້ຮັບຜົລ ປະ ໂຍຊນ໌ ກ່ຽວກັບ ດ້ານກະສິກັມ ການປ່າໄມ້ ອຸດສາຫະກັມ ການຄົມມະນາຄົມຂົນສົ່ງ ການຂຸດຄົ້ນ ຊັພ ຍາກອຣທັມມະຊາຕ ແລະ ບັນດາຂົງເຂຕເສຖກິຈອື່ນໆ ຊ່ວຍເຫລືອກັນ ທາງດ້ານເສຖກິຈ ແລະ ວິທຍາ ກາຣຢ່າງສຸດອົກສຸດໃຈ ຊ່ວຍເຫລືອກັນ ໃນການກໍ່ສ້າງພລັງງານ ແລກປ່ຽນຜູ້ຊ່ຽວຊານ ບັນດາ ຂແນງ ການເສຖກິຈ ວັທນະທັມ ແລະວິທະຍາສາຕວິທຍາການ ຮ່ວມມືກັນທາງດ້ານສີລປະການ ສຶກສາ ສາທາ ຣະນະສຸຂ ຂ່າວສາຣໜັງສືພິມ ວິທະຍຸກະຈາຍສຽງ ພາພຍົນຕ໌ ກິລາກາຍກັມ ແລະ ບັນດາວັທນະທັມ ອື່ນໆ ສອງຝ່າຍ ຈະເພີ່ມທະວີການພົບປະກັນ ຣະຫວ່າງຂແໜງການຕ່າງໆທີ່ມີສ່ວນກ່ຽວພັນທ໌ ຂອງປະ ເທສ ທັງສອງ ເພື່ອພ້ອມກັນປຶກສາຫາລືປະຕິບັຕບັນດາແຜນການຮ່ວມມືກັນ ໃຫ້ປະກົດເປັນຈິງແລກປ່ຽນ ບົທຮຽນ ຕ່າງໆກ່ຽວກັບການກໍ່ສ້າງເສຖກິຈແລະການຂຍາຍ ວັທນະທັມ.*

*<u>ມາດຕຣາ 4</u>  ສອງຝ່າຍຢືນຢັນ ເຖິງການຕັດສິນໃຈກໍ່ສ້າງຊາຍແດນລາວ ວຽດນາມໃຫ້ເປັນຊາຍແດນ ມິຕ ພາພ ຖານອ້າຍນ້ອງອັນຍາວນານ ລະຫວ່າງປະເທສທັງສອງ ບົນພື້ນຖານແຫ່ງສົນທິສັນຍາ ກຳນົດ ເຂັ້ນ ຊາຍແດນປະເທສ ຣະຫວ່າງ ສາທາຣະນະຣັຖ ປະຊາທິປະໄຕຍ໌ ປະຊາຊົນລາວ ກັບສາທາຣະນະຣັຖ ສັງຄົມນິຍົມ ວຽດນາມ ເມື່ອວັນທີ່ 18/07/77.*

*<u>ມາດຕຣາ 5</u>   ສອງຝ່າຍເຄົາຣົພ ແລະສນັບສນູນຢ່າງສົມບູຣນ໌ ຕໍ່ແນວທາງສາກົລ ກັມມາຊົບເປັນເອກຣາຊ ເປັນເຈົ້າຕົນເອງຂອງກັນ ແລະ ກັນ. ສອງຝ່າຍຈະອອກແຮງເພີ່ມຄວາມສາມັຄຄີແບບສູ້ຣົບ ແລະ ການ ພົວພັນທ໌ຮ່ວມມືກັນກັບປະເທສ ສັງຄົມນິຍົມ ອ້າຍນ້ອງ ຕັ້ງໜ້າປະກອບສ່ວນຂອງຕົນ ພ້ອມກັບປະເທສ ສັງຄົມນິຍົມ ກັບຂະບວນການຄອມມຸຍນິສສາກົລ ເພີ່ມທະວີຄວາມສາມັຄຄີ ສນັບສນູນແລະຊ່ວຍເຫລືອ ຊຶ່ງກັນແລະກັນ ບົນພື້ນຖານ ລັທທິມາກ-ເລນິນ ແລະ ລັທທິສາກົລກັມມາຊົບ. ເພີ່ມທະວີຄວາມ ສາມັຄ ຄີແບບ ສູ້ຣົບ ການຮ່ວມມື ຢ່າງຍາວນານ ແລະຊ່ວຍເຫລືອຊຶ່ງກັນ ແລະ ກັນ ກັບປະເທສ ກັມພູຊາ ອ້າຍ ນ້ອງຢ່າງບໍ່ຢຸດຢັ້ງ ຕາມລັກການ໌ ສເມີພາພຢ່າງສົມບູຣນ໌ ເຄົາຣົພຄວາມເປັນເອກຣາຊ ອະທິ ປະໄຕຍ໌ ຜືນແຜ່ນດິນອັນຄົບຖ້ວນຂອງກັນ. ສນັບສນູນພາຣະກິຈຕ໌ຂອງປະຊາຊົນບັນດາປະເທສເອ ເຊັຽ ອາຄະເນ ເພື່ອເອກຣາຊແຫ່ງຊາຕ ປະຊາທິປະໄຕຍ໌ ສັນຕິພາພ ກາຣຮ່ວມມືກັນ ກັບປະ ເທສໃນພາຄພື້ນ ເຄົາຣົພຄວາມເປັນເອກຣາຊອະທິປະໄຕຍ໌ ຜືນແຜ່ນດິນອັນຄົບຖວ້ນຂອງກັນ ບໍ່ແຊກແຊງ ເຂົ້າວຽກ ງານພາຍໃນຂອງກັນສເມີພາພ ແລະຕ່າງມີຜົລ ປະໂຍຊນ໌ ພ້ອມກັນຄົງໂຕຢູ່ໂດຽສັນຕິ ສນັບສນູນ ກາຣຕໍ່ສູ້ ຂອງປະຊາຊົນບັນດາ ປະເທສເອເຊັຽ-ອາຟຣິກາ, ອະເມຣິກາລາຕິນ ຕ້ານລັທທິ ຈັກກະພັດ,*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຕ້ານລັທທິຈຳແນກເຊື້ອຊາດ ເພື່ອຄວາມເປັນເອກຣາຊແຫ່ງຊາດ ປະຊາທິປະໄຕຍ໌ ແລະຄວາມກ້າວໜ້າທາງສັງຄົມ, ສນັບສນູນ ການຕໍ່ສູ້ຂອງຊົນຊັ້ນກັມມະກອຣ ແລະ ປະຊາຊົນຜູ້ອອກ ແຮງງານໃນບັນດາປະເທສທືນນິຍົມ ເພື່ອຍາດເອົາສິທດຳຣົງຊີວິດປະຊາທິປະໄຕຍ໌ ແລະຄວາມກ້າວໜ້າທາງສັງຄົມ ໃຫ້ຄວາມໝາຍໝັ້ນວ່າ ຈະເຮັດທຸກສິ່ງທຸກຢ່າງຈົນສຸດກຳລັງຂອງຕົນ ເພື່ອອີງ ໃສ່ປະກອບສ່ວນເຂົ້າໃນພາຣະກິຈ ຕໍ່ສູ້ຮ່ວມຂອງປະຊາຊົນໃນໂລກ ເພື່ອສັນຕິພາພ ເອກຣາຊແຫ່ງຊາດປະຊາທິປະໄຕຍ໌ ແລະສັງຄົມນິຍົມ.

<u>ມາຕຣາ 6</u> ສອງຝ່າຍຈະແລກປ່ຽນຄວາມຄິດຄວາມເຫັນກັນ ຢ່າງສມ່ຳສເມີກ່ຽວກັບບັນຫາຕ່າງໆທີ່ກ່ຽວພັນກັບປະເທສທັງສອງ ແລະບັນຫາສາກົລຕ່າງໆທີ່ທັງສອງຝ່າຍຕ່າງມີຄວາມສົນໃຈ ດ້ວຍການພົບປະກັນຣະຫວ່າງບັນດາຜູ້ນຳຂອງພັຄຂອງຣັຖ, ດ້ວຍການໄປຢ້ຽມຢາມຂອງບັນດາຄະນະຜູ້ແທນ ເປັນທາງການ ແລະບັນດາຜູ້ຕາງໜ້າພິເສສ ຫລືໂດຽທາງການທູຕ, ສອງຝ່າຍຈະເສີມກາຣເປີດກວ້າງ ກາຣພົວພັນທ໌ຣະຫວ່າງບັນດາອົງຄ໌ກາຣຈັດຕັ້ງມະຫາຊົນ ຂອງປະເທສທັງສອງ. ທຸກບັນຫາທີ່ກ່ຽວພັນ ເຖິງສາຍພົວພັນທ໌ ຣະຫວ່າງປະເທສທັງສອງຈະໄດ້ຮັບການແກ້ໄຂໂດຽການເຈຣະຈາ ກັນດ້ວຍຈິດໃຈແຫ່ງຄວາມເຂົ້າໃຈ ແລະເຄົາຣົພຊຶ່ງກັນ ແລະກັນ.

<u>ມາຕຣາ 7</u> ສົນທິສັນຍາສບັບນີ້ ຈະໄດ້ຮັບການໃຫ້ສັຕຍາບັນແລະມີຜົລສັກດ໌ສິທ ນັບແຕ່ມື້ແລກປ່ຽນສັຕຍບັນສບັບນີ້ເປັນຕົ້ນໄປ. ການແລກປ່ຽນສາຣ ສັຕຍາບັນ ຈະໄດ້ດຳເນີນຢູ່ທີ່ຮາໂນຽ ນະຄອນຫລວງແຫ່ງ ສາທາຣະນະຣັຖ ສັງຄົມນິຍົມວຽດນາມ ໃນເວລາ ອັນໄວ ເທົ່າທີ່ຈະໄວໄດ້.

ສົນທິສັນຍາສບັບນີ້ ມີຄຸນຄ່າໃນໄລຍະ 25 ປີ ແລະຈະໄດ້ຕໍ່ອາຍຸໄປໃນໂຕເອງຂອງມັນເທື່ອລະ10 ປີ ຖ້າວ່າຝ່າຍໜຶ່ງຝ່າຍໃດ ຂອງພາຄີຄູ່ສັນຍາ ບໍ່ແຈ້ງຄວາມປະສົງຄ໌ຢາກລົບລ້າງສົນທິສັນຍາສບັບນີ້ ໃຫ້ອີກຝ່າຍໜຶ່ງຊາບລວ່ງໜ້າດ້ວຍລາຍລັກອັກສອຣ ຢ່າງໜອ້ຍ ໜຶ່ງປີ ກ່ອນທີ່ສັນຍາຈະສິ້ນສຸດກຳນົດ.

ເຮັດທີ່ວຽງຈັນທນ໌ ນະຄອນຫລວງຂອງສາທາຣະນະຣັຖປະຊາທິປະໄຕຍ໌ປະຊາຊົນລາວ ວັນທີ່ 18 ກໍຣະກະດາ 1977 ເປັນ ສອງສບັບ ພາສາລາວ ແລະພາສາວຽດນາມ. ທັງສອງສບັບລາວ ແລະວຽດນາມລວັນແລ້ວແຕ່ມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| ຕາງໜ້າ ສ.ປ.ປ.ລ, | ຕາງໜ້າ ສ.ສ ວຽດນາມ |
| ໄກສອນ ພົມວິຫານ (Kaysone Phomvihane) | ຜາມວານດົງ (Pham Van Dong) |
| ນາຍົກຣັຖມົນຕຣີ | ນາຍົກຣັຖມົນຕຣີ |



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1978, ສຖານະການໃນອິນດູຈີນເລີ່ມຕຶງຄຽດຢ່າງຮ້າຍແຮງ ເພາະຣັຊເຊັຍຍື່ນມືມາຊ່ວຍ ວຽດນາມ ຄ.ມ.ນ. ຄຸກຄາມເອເຊັຍ ຕາວັນອອກສ່ຽງໃຕ້ ເຮັດໃຫ້ຈີນມີຄວາມກາງວົນ ເຖິງຄວາມປອດໄພ້ຍ ຂອງຈີນ ໃນພາກໃຕ້. ຈື່ງໄດ້ເກີດສົງຄາມຈີນ ແລະ ວຽດນາມໃນ ປີ 1979. ຈີນແຜ່ນດິນໃຫ່ຍໄດ້ສົ່ງກຳລັງຫລາຍ ກອງທັພໄປໂຈມຕີ ວຽດນາມເໜືອຕາມຊາຍແດນ ພາກເໜືອ ຂອງວຽດນາມຈີນເກືອບເຖິງຮ່າໂນ້ຍ ເຮັດ ໃຫ້ວຽດນາມເໜືອຕ້ອງຖອນກຳລັງຂອງຕົນທີ່ໄດ້ສົ່ງໄປຄຸກຄາມ ປະເທສໄທ໌ຍ ຢູ່ໃນຂເມນ ແລະລາວ ເປັນຈຳນວນຫລາຍກອງທັພ ເພື່ອກັບໄປປ້ອງກັນວຽດນາມເໜືອ.

ໃນປີ 1978 ຢູ່ປະເທສຝຣັ່ງເສສ ສະຖານທຸຕຈີນເປັນຫວ່ງເຖິງຊີວິດຂອງຜູ້ນຳລາວຝ່າຍຂວາ ທີ່ຖືກສົ່ງໄປ ສູນສັມມະນາ (ຄຸກ) ຢູ່ວຽງໄຊ໌ຍ ແຂວງ ຫົວພັນ, ສຖານທຸຕຈີນໃນປະເທສຝຣັ່ງ ຈື່ງໄດ້ຕິດຕໍ່ຜູ້ຕາງໜ້າ ລາວທີ່ປະເທສຝຣັ່ງເສສ ໃຫ້ເຂົ້າພົບ ເພື່ອຊອກຫາວິທີ ຊ່ວຍຜູ້ນຳລາວ ທີ່ຖືກສົ່ງໄປສັມມະນາ, ອາດເປັນ ໂອກາສໃຫ້ໄດ້ພົ້ນຈາກການຄວບຄູມຂອງວຽດ, ແຕ່ຄົນລາວບໍ່ມີການຈັດຕັ້ງດີ ເຖິງມີ ກໍມີແຕ່ ການຈັດຕັ້ງ ແບບວົງແຄບ ໆ ພັຄໃຜ ພັຄມັນ ຍ້ອນຂາດຄວາມເຊື່ອໃຈ, ມາຈາກການຕົກເປັນອົພະຍົບ ທີ່ບໍ່ຮູ້ຈັກກັນດີ ພໍ ບໍ່ໄດ້ມາຈາກແຂວງດຽວກັນ, ເຜົ່າດຽວກັນ, ມີຄວາມຄິດເຫັນບໍ່ຄືກັນ ນອກຈາກນີ້ຍັງມີການແຊກແຊງ ຂອງຄອມມຸຍນິສຕ໌ ເຂົ້າໄປສ້າງຄວາມແຕກແຍກອີກ ຈື່ງພາໃຫ້ ມື້ດຽວ ມີ 20 ກວ່າ ຄນະໄດ້ເຂົ້າໄປພົບ ສຖານທຸຕຈີນໃນປະເທສຝຣັ່ງເສສ. ຄນະໃດ ກໍແມ່ນຜູ້ຕາງໜ້າ ຄະບວນກູ້ຊາຕ ລາວ. ໃນເມື່ອສຖານທຸຕ ຈີນເຫັນເຫຕການ ເປັນແບບນີ້ ສຖານທຸຕຈີນ ຈື່ງໄດ້ສັ່ງໃຫ້ກັບໄປຈັດຕັ້ງກັນແລ້ວໃຫ້ສົ່ງຄນະດຽວ ກັບມາ ພົບສຖານທຸຕຈີນ ທີ່ປະເທສຝຣັ່ງເສສອີກ ແຕ່ເມືອກັບໄປແລ້ວ ກໍບໍ່ມີຜູ້ຕາງໜ້າລາວ ກັບໄປພົບສຖານ ທຸຕຈີນ ອີກເລີຍ.

ຍ້ອນແບບນີ້ ໃນປີ 1979 ຈີນເປີກສາກ ຕີ ວຽດນາມເໜືອ ຕາມຊາຍແດນວຽດນາມ, ໜ່ວຍກູ້ຊາຕລາວ ຈື່ງບໍ່ມີບົດບາດການກູ້ຊາຕຄືນແມ້ແຕ່ນ້ອຍ ເຖິງມີ ກໍພາຍຫລັງ 1981 ແລະ ກໍບໍ່ມີໃຜມອງເຫັນຄວາມ ສຳຄັນ ກັບຈີນ ໃນການກູ້ຊາຕ.

ຕາມຂ່າວ ທີ່ໄດ້ຮູ້ນັ້ນ, ນາຍພົນບູນປອນ ມາກເທພາຣັກ ຖືກຈີນເຊີນໄປຢ້ຽມຢາມໃນປີ1975. ຈີນໄດ້ ພະຍາຍາມເຕືອນ ບໍ່ໃຫ້ກັບໄປປະເທສລາວ ແຕ່ຜູ້ກ່ຽວບໍ່ໄດ້ສົນໃຈຂາກັບປະເທສ ກໍຖືກສົ່ງໄປຮ່າໂນ້ຽ ຖືກຈັບສົ່ງໄປໃສ່ສູນສັມມະນາວຽງໄຊ ແຂວງຫົວພັນ ໄດ້ເສັຍຊີວິດຢູ່ທີ່ນັ້ນ ຢ່າງທຸຂທໍຣະມານ ທີ່ສຸດ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 14.

# ການຈັດຕັ້ງປ້ອງກັນປະເທສໃນສໄມເກົ່າ

ພາຍຫລັງຝຣັ່ງເສສ, ໄດ້ມອບເອກກະຣາຊໃຫ້ພຣະຣາຊອານາຈັກລາວ. ລາວໄດ້ຈັດຕັ້ງຣັຖບາລ ແຫ່ງພຣະຣາຊອານາຈັກລາວຂຶ້ນ ແລະໄດ້ຈັດຕັ້ງກອງທັພແຫ່ງຊາຕ ເພື່ອປ້ອງກັນຄວາມປອດໄພຍ໌ຂອງປະເທສຊາຕ ດັ່ງຕໍ່ໄປນີ້:

ທ່ານນາຍພົນ ສູນທອນ ປະຖັມະວົງສ໌ ເປັນຜູ້ບັນຊາການ ກອງທັພແຫ່ງຊາຕ ຄົນທຳອິດ, ທ່ານ ພ.ອ ພູມີ ໜໍ່ສວັນ ໄດ້ຮັບແຕ່ງຕັ້ງ ເປັນຜູ້ຮອງ ພ້ອມທັງຮັບ ໜ້າທີ່ ຫົວໜ້າ ເສນາທິການສູງສຸດ ຂອງກອງທັພແຫ່ງຊາຕ. ຕໍ່ມາແມ່ນທ່ານນາຍພົນ ອວັນ ຣາຕິກູນ ເປັນຜູ້ບັນຊາການສູງສຸດຂອງ ກອງທັພ ແຫ່ງຊາຕ ຄົນທີ່ສອງ, ນາຍພົນອຳຄາ ສຸຂະວົງ ເປັນຜູ້ລອງ ແມ່ນຕອນ ສະໄມທີ່ຖືກກອງແລເຮັດ ຣັຖປະຫາຣ ຄົ້ນລົ້ມໃນວັນທີ່ 9 ເດືອນສິງຫາ ປີ 1960. ນາຍພົນອຳຄາ ສຸຂະວົງ ໄດ້ຖືກເຈົ້າສຸວັນນາພູມາ ສົ່ງໄປເກັບເກັນເຂົ້າຢູ່ຊຽງຂວາງ ເພື່ອເອົາມາລ້ຽງແກວ ຢູ່ນະຄອນວຽງຈັນທນ໌ ແຕ່ໄດ້ຖືກທ່ານ ພັນຕຣີ ວ່າງປາວ ກັກຕົວໄວ້ໃນທົ່ງໄຫຫີນ ແລ້ວ ນຳສົ່ງໄປໃຫ້ນາຍພົນພູມີ ໜໍ່ສວັນ ທີ່ສວັນນະເຂຕ.

ຫລັງຈາກນາຍພົນພູມີ ໜໍ່ສວັນໄດ້ປົດປ່ອຍເອົານະຄອນວຽງຈັນທນ໌ຄືນໃນວັນທີ່ 16 ເດືອນທັນວາ 1960 ທ່ານນາຍພົນບູນເລີດ ຊະນີຈັນ ໄດ້ຮັບຕຳແໜ່ງເປັນຜູ້ບັນຊາການທະຫາຣສູງສຸດຂອງກອງທັພແຫ່ງຊາຕ ເປັນຄົນທີ່ສາມ ຜູ້ລອງແມ່ນນາຍພົນພູມີ ໜໍ່ສວັນ ຈຶ່ງໄດ້ຈັດຕັ້ງກຣົມປະສາງານຂຶ້ນທີ່ນະຄອນວຽງຈັນທ໌ ເພາະມີຫລາຍການຈັດຕັ້ງໂພດ. ໃນວັນທີ່ 19 ເດືອນ ເມສາ (April) 1964, ຫລັງຈາກນາຍພົນກຸປະສິດ ແລະນາຍພົນສີໂຫ ໄດ້ທຳການປະຕິວັດ; ນາຍພົນອ້ວນ ຣາຕິກູນ ໄດ້ກັບຄືນມາຮັບຕຳແໜ່ງ ຜູ້ບັນຊາການສູງສຸດ ຂອງກອງທັພແຫ່ງຊາຕລາວ ຄັ້ງທີ່ສອງ. :ເພື່ອໃຫ້ຕິດຕາມວຽກໄດ້ຢ່າງໃກ້ຊິດ ນາຍພົນພູມີ ໜໍ່ສວັນ ຍັງກຳໜ້າທີ່ເປັນຜູ້ລອງຕາມເຄີຍ.

ໃນປີ 1965, ນາຍພົນກຸປະສິດ ອາໄພ໌ຍ ໄດ້ປະຕິວັດໄລ່ ນາຍພົນພູມີ ໜໍ່ສວັນ, ນາຍພົນສີໂຫ ລານພຸທກູນ ແລະນາຍພົນທ້າວມາ ໄປລີ້ໄພ໌ຍຢູ່ປະເທສໄທ໌ຍ.

ໃນປີ 1966 ທ່ານນາຍພົນອວັນ ຣາຕິກຸນ ພົ້ນກະສຽນ ອາຍຸປີການ ໄດ້ລາອອກໄປກິນເບັ້ຍບຳນານ ແລ້ວແມ່ນ ທ່ານນາຍພົນບູນປອນ ມາກເທພາຣັກ ໄດ້ເຂົ້າຮັບຕຳແໜ່ງເປັນຜູ້ບັນຊາການສູງສຸດ ຂອງກອງທັພແຫ່ງຊາຕ ນາຍພົນກຸປະສິດ ອາໄພຍ໌ ເປັນຜູ້ລອງ. ທັງສອງໄດ້ຂຶ້ນເປັນແມ່ທັພລາວຊຸດສຸດທ້າຍ ເຖິງປີ 1975, ປີທີ່ ພັຄລາວ ຄ.ມ.ນ. ໄດ້ຍຶດອຳນາດ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຫລັງຈາກລາວໄດ້ ຮັບເອກຣາຊຈາກຝຣັ່ງເສສ ປະເທສລາວແບ່ງເປັນ 12 ແຂວງຄື: ແຂວງຟົງສາລີ, ແຂວງຫລວງນ້ຳທາ, ແຂວງຫລວງພຣະບາງ, ແຂວງຫົວພັນ, ແຂວງໄຊຍະບູຣີ, ແຂວງວຽງຈັນທນ໌, ແຂວງຊຽງຂວາງ, ແຂວງຄຳມ່ວນ, ແຂວງສວັນນະເຂຕ, ແຂວງສາຣະວັນ, ແຂວງຈຳປາສັກ ແລະ ແຂວງ ອັຕະປື.

ໃນປີ 1956, ເມືອງລາວໄດ້ແບ່ງ ການປ້ອງກັນ ປະເທສເປັນ **4 ພາຄ** ຄື:
-**<u>ພາຄໜຶ່ງ ປະກອບດ້ວຍແຂວງ:</u>** ຟົງສາລີ, ຫລວງນ້ຳທາ,ແຂວງຫລວງພຣະບາງ, ໄຊຍະບູຣີ
-**<u>ພາຄສອງ ປະກອບດ້ວຍແຂວງ:</u>** ແຂວງ ຫົວພັນ, ແຂວງ ຊຽງຂວາງ, ແຂວງ ວຽງຈັນ.
-**<u>ພາຄສາມ ປະກອບດ້ວຍແຂວງ:</u>** ແຂວງ ຄຳມ່ວນ, ແຂວງ ສວັນນະເຂດ, ແຂວງ ສາຣະວັນ.
-**<u>ພາຄສີ່ ປະກອບດ້ວຍແຂວງ:</u>** ແຂວງ ຈຳປາສັກ, ແຂວງ ອັດຕະປື.

MRI, MRII, MRIII, and MRIV (MR= Military Region.) ແຕ່ລະພາຄມີຜູ້ບັນຊາການພາຄ ແລະ ມີ ກອງກຳລັງ ປ້ອງກັນພາຄ, ມີການຮ່ວມມືກັນໃນການຕໍ່ສູ້ຄື: ຊ່ວຍພາຄທີ່ຢູ່ໄກ້ຄຽງ, ສົ່ງໄປໜູນຫລັງ ພາຄທີ່ຢູ່ຫາງໄກ ໃນຍາມທີ່ມີຄວາມຕ້ອງການ ຄວາມຊ່ວຍເຫລືອ ຫລື ຖືກຄຸກຄາມນັກ.

ຫລັງຈາກໃນປີ 1962 ຣາຊອານາຈັກລາວໄດ້ແບ່ງການປ້ອງກັນປະເທສເປັນ 5 ພາຄ ດັ່ງຕໍ່ໄປນີ້:
**<u>ພາຄ 1</u>** ສູນກາງຕັ້ງຢູ່ຫລວງພະບາງ, ບັນຊາແຂວງ ຄືເກົ່າ ແລະໃໝ່;
**<u>ພາຄ 2</u>** ສູນກາງຕັ້ງຢູ່ ລ່ອງແຈ້ງ, ບັນຊາການ ແຂວງຫົວພັນ ແລະ ຊຽງຂວາງ;
**<u>ພາຄ 3</u>** ສູນກາງຕັ້ງຢູ່ ສວັນນະເຂດ ບັນຊາການແຂວງຄືເກົ່າ ແລະ ໃໝ່;
**<u>ພາຄ 4</u>** ສູນກາງຕັ້ງຢູ່ປາກເຊ ບັນຊາການ ແຂວງ ເກົ່າ ແລະ ໃໝ່; ແລະ
**<u>ພາຄ 5</u>** ສູນກາງຕັ້ງຢູ່ ຈີໄນໂມ້ ບັນຊາການ ແຂວງວຽງຈັນທນ໌ ແລະ ນະຄອນວຽງຈັນທນ໌.

ທຸກພາຄ ໄດ້ສົ່ງກຳລັງໄປຊ່ວຍກັນ ຍາມມີຄວາມຕ້ອງການ. ພາຄ 1, ພາຄ 3 ແລະ ພາຄ 4 ໄດ້ສົ່ງກຳລັງ ໄປ ຊ່ວຍພາຄ 2 ຫລາຍຄັ້ງ.
ໃນປີ 1970, 1971,1972. ພາຄ 2 ກໍໄດ້ສົ່ງກຳລັງໄປຊ່ວຍພາຄ 4, ພາຄ 3 ແລະ ພາຄ1 ຫລາຍຄັ້ງຄືກັນ ແຕ່ກໍຕ້ອງປ້ອງກັນພາຄ 2 ຢ່າງແຂງແຮງ ເພາະເປັນດ່ານໜ້າຂອງເມືອງເອກ ແຫ່ງພຣະຣາຊອານາ ຈັກ ລາວ ຫາກພາຄ 2 ເສັຍ ກໍໝາຍຄວາມວ່າ ຣາຊຊະອານາຈັກລາວທັງໝົດ ຕ້ອງຕົກໃຫ້ຄອມມຸຍນິສ ຢ່າງ ບໍ່ມີທາງຫລີກ. ຍ້ອນເຫຕນີ້ ວຽດນາມເໜືອຈຶ່ງໄດ້ທູ່ມເທກຳລັງອັນມະຫາສານ ຕໍ່ສູ້ກັບພາຄ 2 ຢ່າງໜັກ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*ແຜນທີ່ 171.ຫລັງຈາກ ສປປ ລາວ ໄດ້ ຍຶດອຳນາດໃນປີ 1975 ເມືອງລາວ ປະກອບດ້ວຍ 17 ແຂວງ (ນັບທັງເຂດເທສບານວຽງຈັນ)*

ປະເທສລາວເປັນດ່ານໜ້າ ການແຊກຊຶມຂອງຄ.ມ.ນ. ໄປສູ່ພາຄພື້ນເອເຊັຍຕາວັນຕົກສ່ຽງໃຕ້ ທີ່ສະຫະຣັຖເປັນຫ່ວງ ແລະກັງວົນນຳດ້ານຄວາມປອດໄພຍ໌ ໂດຽສະເພາະຊາຕລາວ ທີ່ເປັນປະເທສ ນ້ອຍໆ ບໍ່ສາມາດປ້ອງກັນຕົນເອງ ຕໍ່ການຂຍາຍຕົວຂອງຄອມມຸຍນິສຕ໌. ຣັຖບາລລາວຈຶ່ງໄດ້ຮ່ວມມືກັບ ສະຫະຣັຖ ເພື່ອປ້ອງກັນເມືອງລາວ ເພາະເຫັນວ່າຄອມມຸຍນິສຕ໌ວຽດນາມເໜືອ ທີ່ໄດ້ລະເມີດສັນຍາເຈນີວາ ປີ 1954 ອັນມີ 13 ປະເທສໄດ້ລົງລາຍເຊັນຮັບຮູ້ ຄວາມເປັນເອກຣາຊຂອງລາວ ແລະ ສາເຫຕທີ່ ວຽດນາມເໜືອ ໄດ້ໃຊ້ພື້ນແຜ່ນດິນລາວ ເປັນທີ່ລີ້ຊ່ອນ ແລະຝຶກຊ້ອມກຳລັງທະຫາຣ, ເປີດເສັ້ນທາງ ໂຮຈິມິນ ຜ່ານດິນລາວໄປໂຈມຕີ ວຽດນາມໃຕ້ ໄດ້ເຂົ້າມາພົວພັນກັບການ ປະຕິວັດຣັຖປະຫານຂອງ ຣ.ອ ກອງແລ ໃນວັນທີ່ 9 ສິງຫາ 1960 ຢ່າງເປີດເຜີຍ. ຈຶ່ງເກີດສົງຄາມອິນດູຈີນ ໃນ 1960-1975, ຣະຫວ່າງ ສະຫາ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຣັຖ-ວຽດນາມເໜືອ. ການພົວພັນຂອງສະຫາຣັຖ ໄດ້ມີການປ່ຽນແປງ ຫລາຍຢ່າງໃນອີນ ດູຈີນຄື: ກາຍເປັນປະເທສ ທີ່ປົກຄອງ ແບບລະບອບຄອມມຸຍນິສ, ມີປະຊາຊົນຫລາຍລ້ານຄົນກາຍເປັນອົພະຍົບ.

**<u>ທະຫາຣພາຄ 2</u>  ໃນປີ 1962 ຣາຊອານາຈັກລາວໄດ້ແບ່ງເປັນ 5 ພາຄ ຕາມຮູບພາບນີ້. ທະຫາຣພາຄ 1** ມີແຂວງ ຜອງສາລີ, ຫລວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ໄຊຍະບຸຣີ ແລະ ຫລວງພຣະບາງ ປະຊາຊົນໃນພາຄ 1 ມີຫົວອ່ຽງຊ້າຍ, ສນັບສນຸນລາວຄອມມຸຍນິສຕ໌ຫລາຍເປີເຊັນກ່ວາພາກອື່ນໆ ຍ້ອນ ໄດ້ມີການຕໍ່ສູ້ໜັກ ຢູ່ພາຄເໜືອ ຢູ່ເຂຕເໜືອ ແລະທິດຕາວັນອອກຂອງພາຄ, ເສັຍຄ້າຍນ້ຳບັກ ເສັຍແຂວງຟອງສາລີທັງໝົດຕັ້ງແຕ່ປີ 1962 ເສັຍພາຄຕາວັນອອກສຽງເໜືອ ທີ່ຕິດທິດຕາວັນຕົກແຂວງຫົວພັນທັງໝົດ ໃຫ້ສັດຕຣູຕັ້ງແຕ່ປີ 1965 ເປັນຕົ້ນມາ ນອກຈາກນີ້ ສັດຕຣູໄດ້ມີການແຊກຊຶມໃສ່ພາຄ 1 ຕັ້ງແຕ່ ສໄມຝຣັ່ງເສສ, ການແຊກແຊງຢ່າງໜັກໃສ່ພາຄເໜືອຂອງລາວ ແມ່ນສໄມສະຫາຣັຖເຂົ້າໄປພົວພັນ ສົງຄາມ.




*<u>ແຜນທີ່ 172</u>. ການແບງເຂຕ ແຕ່ລະພາຄ ໃນພຣະຣາຊອານາຈັກລາວ ແລະການປ້ອງກັນປະເທສ ກ່ອນ ສ.ປ.ປ.ລ. ເຂົ້າມາຢຶດອຳນາຕ.*



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ການສູນເສັຍປະເທສໃນປີ 1975 ແມ່ນພາຄ 1 ໄດ້ມີປະຊາຊົນອົພະຍົບ ເຂົ້າໄປປະເທສໄທ໌ຍຫລາຍ ເປັນອຳດັບສອງຂອງປະເທສທີ່ໄດ້ອົພະຍົບໜີ. ຜູ້ບັນຊາການພາຄ ແມ່ນ ພົນຕຣີ ເຈົ້າໄຊຍະວົງ, ຜູ້ຮອງ ແມ່ນ ພົນຈັຕະວາ ເຈົ້າວັນນະແສງ ກອງທະຫາຣພາຍໃນພາຄ 1 ມີຄື: ກອງພົນທີ່ 1 ປະກອບດ້ວຍ 5 ກຣົມຄື: ກຣົມ 11, 12, 13, 14 ແລະ15 ແຕ່ລະກຣົມ ມີ: 4 ກອງພັນຮົບ ແລະ 1 ກອງພັນບັນຊາການຄື: ກອງພັນ 111, 112, 113,114 ແລະ 115 ກອງພັນ 121, 122, 123, 124 ແລະ 125. ກອງພັນ 131, 132, 133, 134 ແລະ 135. ກອງພັນ 141, 142, 143, 144 ແລະ 145 ກອງ ພັນ 151, 152, 153, 154 ແລະ155.




*<u>ແຜນທີ່#173</u>. ນີ້ແມ່ນ ຂອບເຂດ ທະຫາຣ ພາຄ1 ດ້ານຕາວັນຕົກ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແຕ່ລະກອງພັນ ມີ 5 ກອງຮ້ອຍ ຄື: 1 ກອງຮ້ອຍລຳລຽງ ແລະ 4 ກອງຮ້ອຍຮົບຄື: 1111, 1112, 1113, 1114 ແລະ 1115, ຫາ 1121, 1122, 1123, 1124, 1125 ຈົນເຖິງ 1511, 1512, 1513, 1514, 1515. ການປ່ຽນແປງຫລັງຈາກ ຈັດຕັ້ງຣັຖະບາລປະສົມສອງຝ່າຍນັ້ນ ບໍ່ຮູ້ຂ່າວການປ່ຽນແປງ ດີຈຶ່ງບໍ່ໄດ້ເອົາມາແຈ້ງໃຫ້ຊາບ.




*ແຜນທີ່ 174. ເຂດທະຫານພາຄ 1 ດ້ານຕາວັນອອກ*

**ທະຫານພາຄ 2** ປະກອບຂຶ້ນໃນປີ 1962 ມີແຂວງ ຊຽງຂວາງ ແລະແຂວງຫົວພັນ. ເປັນພາຄ ທີ່ມີຊາຍແດນຕິດກັບວຽດນາມເໜືອຫລາຍທີ່ສຸດ ແລະມີການຕໍ່ສູ້ໜັກກວ່າພາຄອື່ນ ເພາະເປັນພາຄທີ່ມີທີ່ຕັ້ງ ສູນກາງພັຄລາວຄອມມຸຍນິສຢູ່ຊຳເໜືອ, ເປັນດ່ານໜ້າສຳຄັນໃນການຕໍ່ສູ້ຢູ່ໃນລາວ ໄດ້ສ້າງຄວາມກັນ ດານໃຫ້ວຽດນາມເໜືອຫລາຍທີ່ສຸດ ເພາະຢູ່ໃກ້ຮາໂນຍ ເມືອງເອກຂອງວຽດນາມເໜືອ, ເປັນດ່ານໜ້າ ຂອງ ເມືອງເອກລາວ ຄື ເມືອງຫລວງພຣະບາງ ແລະວຽງຈັນທນ໌. ຫາກພາຄ 2 ເສັຍ ແມ່ນເສັຍເມືອງລາວທັງໝົດ ດັ່ງນີ້ສັດຕຣູຈຶ່ງໄດ້ໂຈມຕີພາຄ 2 ໜັກ ໂດຽໄດ້ໃຊ້ກຳລັງອັນມະຫາສານເຂົ້າໂຈມຕີ ເພື່ອ ການເມືອງ ແລະການທະຫາຣ. ກອງບັນຊາການພາຄ 2 ຕັ້ງຢູ່ລ່ອງແຈ້ງ, ຜູ້ບັນຊາການພາຄ ແມ່ນທ່ານ ນາຍພົນ ຕຣີ ວ່າງປາວ. ຜູ້ຮອງມີສອງທ່ານ ຄື: 1-ພົນຈັຕະວາ ເຈົ້າໂມນີວົງສ໌, ຜູ້ລອງຝ່າຍລາວລຸ່ມ 2- ພ ອ ເນັ່ງຈື້
ທ່າວ, ຜູ້ລອງຝ່າຍລາວເຜົ່າມົ້ງ.

ໃນປີ 1960, ກອງທະຫາຣໃນພາຄ 2 ມີບໍ່ເຖິງ 10 ກອງພັນ ແຕ່ທະຫາຣແກວແລະ ລາວ.ຄ.ມ.ນ. ມີຫລາຍກວ່າ 40 ກອງພັນ ຍ້ອນການລູກລານຂອງສັດຕຣູ ວຽດນາມເໜືອເຂົ້າມາໃນຣາຊອານາຈັກລາວ



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1970 ນາຍພົນ ວ່າປາວຈຶ່ງໄດ້ປັ່ງນກຳລັງພາຄ 2 ມາເປັນກອງພົນ ປະກອບດ້ວຍ 8 ກຣົມຄື: ກຣົມ 21, ກຣົມ 22, ກຣົມ 23 ກຣົມ 24, ກຣົມ 25, ກຣົມ 26 ກຣົມ 27 ແລະ ກຣົມ 28 ແຕ່ລະກຣົມມີ 4 ກອງພັນຣົບ ແລະ 1 ກອງພັນບັນຊາການ. ແຕ່ລະກອງພັນມີ 4 ກອງຮ້ອຍລຸກຣົບ ແລະ ໜຶ່ງກອງຮ້ອຍບັນຊາການ.

ໄດ້ຈັດຕັ້ງເປັນກອງພັນດັ່ງນີ້: ກອງພັນ 211, 212, 213, 214, 215. ກອງພັນ 221, 222, 223, 224, 225. ກອງພັນ 231, 232, 233, 234, 235. ກອງພັນ 241, 242, 243, 244, 245 ກອງພັນ 251, 252, 253, 254, 255 ກອງພັນ 261 ຮອດ 265 ກອງພັນ 271 ຮອດ 275 ແລະກອງພັນ 281 ຮອດ 285. ກອງຮ້ອຍ 2111, 2112, 2113, 2114, 2115. ກອງຮ້ອຍ 2211, 2212, 2213, 2214, 2215. ກອງ ຮ້ອຍ 2311 ຮອດ 2315 ກອງຮ້ອຍ 2411 ຮອດ 2415 ຕໍ່ໆໄປຈົນເຖິງກອງຮ້ອຍ 2811, 2812, 2813, 2814 ແລະ 2815.

ກຳລັງທັງໝົດແມ່ນຢູ່ໃນການຊ່ວຍເຫລືອຂອງສະຫາຣັຖ ດ້ານການປ້ອງກັນພາຄ 2. ຫລັງຈາກ 1973, ສະຫາຣັຖ ໄດ້ຕັດການຊ່ວຍເຫລືອລົງ.

ໃນເດືອນກູມພາ ປີ 1974, ໝົດຣາຊອານາຈັກລາວແບ່ງເປັນຫ້າ **<u>ພາຄ</u>** ມີກຳລັງທະຫາຣແຕ່ພຽງ 52,329 ຄົນ. ລາວ ຄ.ມ.ນ. ມີ 33,115 ຄົນປະສົມກັບກຳລັງວຽດນາມເໜືອ ໜູນຫລັງ 40,000 ຄົນ ລວມທັງໝົດເປັນ 73,115 ຄົນ.

ໃນປີ 1974 ພາຄ 2 ມີກຳລັງທະຫາຣບໍ່ເຖິງ 12 ກອງພັນ ປະກອບເປັນ GM21 ຫາ GM28 ໄດ້ປັ່ງນເປັນກອງພັນ GI 201; 202 ຈົນຮອດ GI 212 ເທົ່ານັ້ນ. ຍ້ອນການຕັດການຊ່ວຍເຫລືອຈາກສະຫາຣັຖໃນວັນທີ່ 22 ເດືອນ ພຶດສພາ (May) 1974 ທ່ານນາຍພົນ ວ່າງປາວຈຶ່ງໄດ້ວາງແຜນ ຄື:

1-ປົດປ່ອຍທະຫາຣອອກ ກ/ ໃຫ້ກັບໄປທຳມາຫາກິນປູກຝັ່ງແລະລ້ຽງສັດ ຂ/ ກັບໄປທຳການຄ້າຂາຍ ຄ/ ກັບໄປຮ່ຳຮຽນຄວາມຮູ້ຕື່ມ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*ແຜນທີ່ 175. ເຂດທະຫານພາກ ສອງ ມີຊາຍແດນຕິດກັບວຽດນາມເໜືອເສັ້ນຍາວ*

2-ກຳລັງທະຫານ ທີ່ເຫລືອທັງໝົດໃນປີ1974 ມີພຽງ 5 ພັນຄົນໄດ້ໂອນໄປເປັນທະຫານ ກອງທັບແຫ່ງຊາຕຂອງພຣະຣາຊອານາຈັກລາວ ຍ້ອນເຫຕການຕ່າງໆເຫລົ່ານີ້ ຈຶ່ງພາໃຫ້ຝ່າຍ ລາວ ຄ.ມ.ນ. ຮູ້ເຫັນຈຸດອ່ອນຂອງຝ່າຍວຽງຈັນທນ໌ ແລ້ວ ກໍສວຍໂອກາດເລີ່ມກໍ່ສ້າງຄວາມວູ້ນວາຍ ຄື: ປິດລອ້ມ GI 212 ທີ່ຢູ່ບວມຫລົງ ແລະ GI 211 ທີ່ເມືອງໝອກ. ໃນເວລາທີ່ກຳລັງທະຫານທີ່ອປະເທດ ໄດ້ມີການເສັຍຫາຍໜັກທີ່ສຸດ ໃຫ້ຝ່າຍຄອມມຸຍນິສ ໃນປີ 1975 ຍ້ອນສະຫາຣັຖ ຖອຍໜີອອກຈາກ ອິນດູຈີນ ຢ່າງບໍ່ໄດ້ຕຽມ ແລະ ບໍ່ໄດ້ຮູ້ມາກ່ອນ ນາຍທະຫານແລະກຳລັງທະຫານ ທັງສອງແຫ່ງນີ້ ໄດ້ໂຕນເຂົ້າປ່າ ແຕ່ກໍຖືກຝ່າຍລາວ ຄ.ມ.ນ. ແລະ ວຽດນາມເໜືອ ປິດລອ້ມ, ທຳລາຍຈົນບໍ່ເຫລືອ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ພາຄ 3




*ແຜນທີ່# 176. ແຜນທີ່ ເຂດແດນຂອງທະຫານ ພາຄ ສາມ*

**ໃນປີ 1962** ປະກອບດ້ວຍແຂວງຄຳມ່ວນ, ແຂວງ ສວັນນະເຂດ ແລະແຂວງ ສາລະວັນ. ເປັນພາຄທີ່ ວຽດນາມເໜືອ ສ້າງເຊັ້ນທາງ ໂຮຈິມິນ Doan 559 ຜ່ານເຂົ້າໄປໂຈມຕີ ວຽດນາມໃຕ້, ຈື່ງຖືກການໂຈມ ຕີ ຖິ້ມລະເບີດຈາກທາງອາກາສ ຂອງສະຫາຣັຖ ໜັກກວ່າ ພາຄອື່ນໆ ໜັກ ກວ່າສົງຄາມ ໂລກຄັ້ງທີ່ສອງ ອີກດ້ວຍ. ຍ້ອນພະຍາຍາມປ້ອງກັນພື້ນທີ່ບໍ່ໃຫ້ວຽດນາມເໜືອໃຊ້ຖນົນ ໂຮຈິມິນມີຈື່ງມີການສູນເສັຍ ກຳລັງ ແລະ ປະຊາຊົນຫລາຍກວ່າທຸກໆພາຄ ໃນ ຣາຊອານາຈັກລາວ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




**The Ho Chi Minh Trail**

*<u>ແຜນທີ່# 177</u> ແຜນທີ່ ທາງຜ່ານ ວຽດນາມເໜືອ ລົງສູ່ວຽດນາມໃຕ້ ເດືອງ 559 ຫລື ທາງໂຮຈີມິນ.*

ວຽດນາມເໜືອໄດ້ທູມເທກຳລັງ ເພື່ອປ້ອງກັນຖນົນໂຮຈີມິນ ທັງອາວຸທອັນທັນສມັຍ ບໍ່ແມ່ນອາວຸທທີ່ໃດ້ໃຊ້ໃນສົງຄາມໂລກຄັ້ງທີ່ສອງ. ແຕ່ແມ່ນອາວຸທປືນຕໍ່ສູ້ ທັນສະໄມ ມີຈະຣວດຕໍ່ຕ້ານອາກາສຍານ SAM ແລະອາວຸທໜັກ ຍິງໄດ້ໄກກວ່າຂອງສະຫາຣັຖ ອີກ. ການຕໍ່ສູ້ທາງຍົນຕ໌ຂອງສະຫາຣັຖ ຈຶ່ງໄດ້ປຽບແດ່ແຕ່ກໍຍັງກັນດານທີ່ສຸດຕໍ່ກອງທັພອາກາສສະຫາຣັຖ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສູນກາງກອງບັນຊາການພາຄ 3 ຕັ້ງຢູ່ສວັນນະເຂດ ຜູ້ບັນຊາການພາຄແມ່ນທ່ານນາຍພົນຕຣີ ໜູເພັດ ດາວເຮືອງ (ໄດ້ຖືກຫລອກໄປສັມມະນາທີ່ສູນດັດສ້າງ ວຽງໄຊ ແຂວງຫົວພັນ ແລະໄດ້ເສັຍຊີວິດ ຢ່າງທາຣູນທີ່ສຸດຈາກ ລາວ ຄ.ມ.ນ. ແລະ ແກວ) ຜູ້ລອງແມ່ນ ນາຍພົນຈັຕະວາ ຄອ້ງ ວົງນໍຣາຊ. ກໍາລັງ ທະຫາຣຢູ່ໃນ ພາຄ 3 ມີຄື: ກອງພົນທີ່ 3 ປະກອບດ້ວຍ 5 ກຣົມ ຄື: ກຣົມ 31; 32; 33; 34 ແລະ 35.ແຕ່ລະກຣົມມີ 4 ກອງພັນຣົບ ແລະ 1 ກອງພັນບັນຊາການ. ແຕ່ລະກອງພັນປະກອບດ້ວຍ 4 ກອງ ຮ້ອຍຣົບ ແລະ ໜຶ່ງກອງຮ້ອຍບັນຊາການ. ການປ່ຽນແປງໃນປີ 1974 ບໍ່ໄດ້ບັນທຶກໄວ້.

ໃນປີ 1972 ພາຄ 3 ໄດ້ສົ່ງກຣົມ 33 ແລະກຣົມ 35 ໄປຊ່ວຍພາຄ 2 ເຂົ້າຍຶດທົ່ງໄຫຫີນ ແຕ່ ໄດ້ມີການຢຸດຍິງກ່ອນຈະໄປເຖິງທົ່ງໄຫຫີນ ສອງກຣົມນີ້ຈຶ່ງໄດ້ກັບພາຄ 3.

**<u>ພາຄ 4</u>** ປະກອບດ້ວຍແຂວງເຊກອງ, ຈໍາປາສັກ, ອັຕະປື, ແລະແຂວງເຊໂດນ ມີຊາຍແດນຕິດກັບຂເມນແລະວຽດນາມໃຕ້ ທາງພາຄຕາວັນອອກ. ໃນສະໄມ ປີ 1959 ຫາ 1970 ເຈົ້າຊີວິດ ສີຫານຸ ບໍ່ຄ່ອຍລ່ອງຮອຍກັບສະຫາຣັຖ. ຂເມນຈຶ່ງໄດ້ປ່ອຍ ປະເທສຂອງຕົນໃຫ້ເປັນບ່ອນ ຫລົ້ຊ່ອນກໍາລັງ ຂອງ ວຽດນາມເໜືອ, ເປັນທີ່ຝຶກຊ້ອມກໍາລັງວຽດກົງ ທີ່ແມ່ນປະຊາຊົນວຽນາມໃຕ້ ໄດ້ເຂົ້າໄປໂຈມຕີວຽດນາມ ໃຕ້ບ້ານຂອງຕົນເອງ ຈຶ່ງໄດ້ເຮັດໃຫ້ສະຫາຣັຖຕ້ອງລະເມີດ ເຂົ້າໄປໂຈມຕີຂເມນຫລາຍຄັ້ງ. ສີຫານຸ ປະກາສຕົນເອງເປັນກາງ ແຕ່ຄວາມເປັນກາງນັ້ນ ຊ່ວຍຕົນເອງບໍ່ໄດ້ ເພາະແກວເໜືອໃຊ້ເປັນເຄື່ອງມື ເພື່ອຕໍ່ສູ້ກັບວຽດນາມໃຕ້ໃຫ້ໜັກຂຶ້ນ. ເມື່ອຊາຍແດນຂເມນ ທີ່ຕິດກັບວຽດນາມໃຕ້ ຮັບການໂຈມຕີໜັກຈາກ ສະຫາຣັຖ ຝ່າຍຄອມມຸຍນິສຕ໌ວຽດນາມ ກໍໄດ້ຂຍາຍພື້ນທີ່ເລິກເຂົ້າໄປຫາ ພາຄ 4 ເຮັດໃຫ້ ການຕໍ່ສູ້ໄດ້ຣູນແຮງຂຶ້ນ.

ໃນປີ 1965-1972 ພາຄ 4 ຈຶ່ງໄດ້ຮອ້ງຂໍກໍາລັງທະຫາຣໄທ໌ຍເຂົ້າໄປຊ່ວຍຫລາຍກຣົມ. ພາຄ 4 ໄດ້ເສັຍພື້ນທີ່ປະມານ 60 ເປີເຊັນ ໃຫ້ຄອມມຸຍນິສ, ໂດຽສະເພາະແມ່ນພາຄຕາວັນອອກ ແລະແຖວພູສູງ ປາກຊອງ. ກອງບັນຊາການພາຄ 4 ຕັ້ງຢູ່ເມືອງປາກເຊ. ນາຍພົນຕຣີສຸດໃຈ ວົງສວັນ ເປັນຜູ້ບັນຊາການພາຄ, ຜູ້ລອງແມ່ນ ທ່ານ ພ.ອ ຄໍາສຸກ ສໍຣາຊພັກ. ກໍາລັງທະຫາຣຢູ່ໃນພາຄ 4 ມີຄື ກອງພົນທີ່ 4 ປະກອບດ້ວຍກຣົມ 41, 42, 43, 44, ກຣົມ 45 ແຕ່ລະກຣົມມີ 4 ກອງພັນຣົບແລະ1 ກອງພັນບັນຊາການ ມີກອງພັນ 411, 412, 413, 414 ແລະ 415 ແລະ ຕໍ່ໆໄປ 451, 452, 453, 454 ແລະ 455. ແຕ່ລະກອງພັນມີ 4 ກອງຮ້ອຍຣົບ ແລະ ໜຶ່ງກອງຮ້ອຍບັນຊາການຄື: 4111, 4112, 4113, 4114 ແລະ 4115 (ຕໍ່ໄປ).


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com




*<u>ແຜນທີ່#178</u>. ນີ້ແມ່ນເຂດທະຫານ ພາຄ 4 ທິສໃຕ້ສຸດຂອງປະເທສລາວ.*

**<u>ພາຄ 5</u>** ໃນປີ 1962 ພາຄ 5 ປະກອບດ້ວຍແຂວງ ວຽງຈັນທນ໌ ແລະ ນະຄອນວຽງຈັນທນ໌. ແມ່ນພາຄທີ່ຮັກສາໃຈກາງຂອງປະເທສຊາຕ, ບ່ອນທີ່ມີການເຄື່ອນໄຫວຂອງທຸກພັຄການເມືອງ ຢ່າງບໍ່ຢຸດບໍ່ຢ່ອນອີກຢ່າງໜຶ່ງ ແມ່ນບ່ອນສະຖານທູຕນາໆຊາຕທົ່ວໂລກປະຈໍາຢູ່ ແລະມີການເຄື່ອນໄຫ່ວທາງການເມືອງ, ການຕິດຕໍ່ຢູ່ຕລອດເວລາ. ເປັນພາຄທີ່ມີການເຄື່ອນໄຫ່ວສະລັບສັບຊ້ອນ ປ້ອງກັນຍາກທີ່ສຸດ ຢູ່ໃນພຣະຣາຊ ອານາຈັກລາວ ຍ້ອນການເມືອງຝ່າຍຄອມມຸຍນິສຕ໌ ບີບບັງຄັບໃຫ້ເອົານະຄອນຫລວງວຽງຈັນທນ໌ ແລະ ຫລວງພະບາງ ເປັນສູນກາງການເຕົ້າໂຮມລາວສອງຝ່າຍ ແລະໃຫ້ປອດ (ບໍ່ໃຫ້ມີ) ກໍາລັງຂອງຝ່າຍຂວາ. ພາກ 5 ບໍ່ມີການສູ້ຮົບດ້ານທະຫາຣ. ສະພາບຂອງແຕ່ ລະພາຄ ມີການເຄື່ອນໄຫວຂອງຝ່າຍສັດຕຣູໃນລະຍະນັ້ນແຕກຕ່າງກັນ, ສະນັ້ນ ການປະຕິບັດງານທາງທະຫາຣ ແລະການຕໍ່ສູ້ ຈຶ່ງບໍ່ເໝືອນກັນ. ກອງບັນຊາ**ການພາຄ 5 ຕັ້ງ**ຢູ່ ຈີໄນໂມ້. ທ່ານນາຍ ພົນຕຣີ ທອງລິດ ໂຈກເບັ່ງບູນ ເປັນຜູ້ບັນຊາການ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພາຄ 5 (ທ່ານໄດ້ເສັຍຊີວິດ ໃນວັນທີ່ 10 ເດືອນກໍລະກະດາ ປີ 2007 ເວລາ 5:30 ຕອນເຊົ້າ ທີ່ປະເທສຝຣັ່ງເສສ) ຜູ້ລອງ ແມ່ນ ທ່ານນາຍພົນຈັດຕະວາ ອາດສະພັງທອງ ປະທັມະວົງ. ກໍາລັງທະຫາຣ ພາຄ 5 ມີຄື: ກອງພົນທີ່ 5 ປະກອບດ້ວຍ 5 ກຣົມ 51, 52, 53, 54 ແລະ 55 ແຕ່ລະກຣົມມີ 4 ກອງພັນຣົບ ແລະ 1 ກ.ພ. ບັນຊາການຄື ກອງພັນ 511, 512, 513, 514, 515 ຕໍ່ໆໄປ. ແຕ່ລະກອງພັນມີ 5 ກອງຮ້ອຍ 4 ກອງຮ້ອຍ ຣົບ ແລະ 1 ກອງຮ້ອຍບັນຊາການ. ບໍ່ໄດ້ບັນທຶກການ ປ່ຽນແປງຫລັງ ຈາກປີ 1974.




*<u>ແຜນທີ່#179</u>. ນີ້ແມ່ນ ພື້ນທີ່ ປ້ອງການຂອງຝ່າຍທະຫາຣ ພາຄ ຫ້າ (MR-V)*

<u>ໝາຍເຫດ</u>

1. ພາຄ 1 ກວມເຂດນະຄອນຫລວງພຣະບາງ ແລະ ພາຄ 5 ກວມເຂດນະຄອນວຽງຈັນ ຊຶ່ງ ເປັນເຂດທີ່ຝ່າຍວຽງຈັນແລະຝ່າຍປະເທດລາວ ໂດ້ຕົກລົງກັນຈັດໃຫ້ເປັນເຂດເປັນກາງ ຈາກປີ 1962 ໄປຫາ 1975. ນະຄອນສອງແຫ່ງນີ້ ບໍ່ໄດ້ມີການເຄື່ອນໄຫວດ້ານທະຫານປານໃດ ແຕ່ເຕັມ ໄປ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ດ້ອຍບັນຫາການເມືອງ ທີ່ເກີດມາຈາກສຖານທູດຕ່າງຊາດ. ສອງພາກນີ້ ໄດ້ມີຊາວອົບປະຍົກໜີອອກຈາກທ້ອງທີ່ຫລາຍກວ່າພາກອື່ນໆທັງໝົດ.

2. ຫລັງຈາກ ສສປລ ໄດ້ຍຶດອຳນາດໃນປີ 1975 ມາ ເມືອງລາວໄດ້ແບ່ງເປັນ 17 ແຂວງ ດັ່ງຕໍ່ໄປນີ້: 1-ແຂວງ ຜົ້ງສາລີ, 2-ແຂວງ ຫລວງນ້ຳທາ, 3-ແຂວງ ບໍແກ້ວ, 4-ແຂວງ ອຸດົມໄຊ, 5-ແຂວງ ຫລວງພຣະບາງ, 6-ແຂວງ ຫົວພັນ, 7-ແຂວງ ໄຊຍະບູຣີ, 8-ແຂວງ ວຽງຈັນທນ໌, 9-ນະຄອນຫລວງ ວຽງຈັນທນ໌,10-ແຂວງຊຽງຂວາງ,11-ແຂວງ ບໍຣິຄຳ ໄຊ, 12-ແຂວງຄຳມ່ວນ, 13-ແຂວງ ສວັນນະເຂດ, 14-ແຂວງ ສາຣະວັນ, 15-ແຂວງ ເຊກອງ, 16-ແຂວງ ຈຳປາສັກ, ແລະ 17-ແຂວງ ອັຕະປື.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 15

# ການສຶກສາ ແລະ ສຸຂພິບານ

## ການສຶກສາ

ສໄມກ່ອນຝຣັ່ງເສສມາປົກຄອງລາວ ບໍ່ມີໂຮງຮຽນຫລວງ ແລະບໍ່ມີນາຍຄູຫລວງ, ຄົນລາວໄດ້ອາໄສວັດວາອາຣາມ ເປັນບ່ອນຮຽນໜັງສື. ປະຊາຊົນລາວຫລາຍກ່ວາ 90 ເປີເຊັນບໍ່ຮູ້ອ່ານຮູ້ຂຽນພາສາລາວ. ໃນສໄມນັ້ນ ມີແຕ່ນັກບວດ ທີ່ອ່ານໄດ້ຂຽນເປັນພາສາລາວ, ນອກຈາກນີ້ ຍັງຂາດອຸປະກອນການສອນທຸກຢ່າງ ແມ່ນເອົາຖ່ານໄຟແລະສີ ມາຂຽນໃສ່ໃບລານໄວ້ເທົ່ານັ້ນ. ຜູ້ທີ່ໄດ້ຮຽນໜັງສື ກໍແມ່ນແຕ່ຜູ້ມີເງິນຈຶ່ງຈ້າງຄູມາສອນໄດ້. ຍ້ອນຂາດການສຶກສານີ້ ຄວາມກ້າວໜ້າຂອງປະຊາຊົນລາວ ຈຶ່ງຕົກຕ່ຳ ແລະຢູ່ໃນຄວາມຍາກຈົນ ຄື: ຂາດຜູ້ມີວິຊາຄວາມຮູ້ ບໍ່ມີນັກຊ່ຽວຊານ ທຸກຢ່າງນັ້ນເອງ. ພາຍໃຕ້ການປົກຄອງຂອງຝຣັ່ງເສສ ຄົນລາວມີຄວາມກ້າວໜ້າທາງດ້ານການສຶກສາຂຶ້ນແດ່ ເພາະຝຣັ່ງໄດ້ຕັ້ງໂຮງຮຽນສອນຕາມຫົວເມືອງຕ່າງໆ, ແຕ່ບໍ່ມີໂຮງຮຽນຢູ່ຕາມຊົນນະບົດ. ຢູ່ໃນໂຮງຮຽນຕ່າງໆ ສ່ວນຫລາຍຝຣັ່ງ ໄດ້ເອົາຄຣູຄົນວຽດນາມໄປສອນ ໃຊ້ແຕ່ພາສາວຽດນາມສ່ວນຫລາຍ ເພາະສໄມນັ້ນ ນັກຮຽນຄົນວຽດນາມມີຈຳນວນຫລາຍກວ່ານັກຮຽນຄົນລາວ.

ໂຮງຮຽນຢູ່ລາວກໍມີແຕ່ຂັ້ນປະຖົມເທົ່ານັ້ນ ບໍ່ມີຂັ້ນມັທະຍົມ ອັນໃດກໍລວ້ນແລ້ວແຕ່ຜູ້ມີເງິນ ຫລືລູກຫລານຂອງຜູ້ເປັນເຈົ້າຂູນມູນນາຍ ທີ່ຢູ່ໄກ້ສິດກັບຝຣັ່ງ ຈຶ່ງໄດ້ເຂົ້າໂຮງຮຽນ. ຢູ່ຕາມຊົນນະບົດ, ບ້ານນອກ ຄອກຄະເນ ແມ່ນບໍ່ໄດ້ເຂົ້າໃກ້ໂຮງຮຽນ ເຖິງຮຽນໄດ້ ເມື່ອຈົບຂັ້ນປະຖົມບໍຣິບູນແລ້ວ ຜູ້ທີ່ມີເງິນຈຶ່ງໄດ້ໄປຮຽນຕໍ່ຢູ່ຮາໂນ້ຍ, ວຽດນາມເໜືອ. ໃນສໄມຝຣັ່ງມາປົກຄອງລາວ ຈົນເຖິງ ປີ 1954 ຄົນລາວໄດ້ຮັບການສຶກສາມີປະມານ 30 ເປີເຊັນ, ການຮຽນພາສາລາວມີພຽງ ປ3 ຫລື ຫ້ອງທີ່ສາມ, ຫລັງຈາກ ປ3 ແລ້ວ ຕ້ອງຮຽນເປັນພາສາຝຣັ່ງທັງໝົດ. ຈາກປີ 1956 ເປັນຕົ້ນມາ ຣັຖບາລລາວໄດ້ຮັບການຊ່ວຍເຫລືອທາງດ້ານການສຶກສາຈາກສະຫາຣັຖ. ຈຶ່ງມີການສ້າງໂຮງຮຽນຂຶ້ນຕາມຫົວເມືອງ, ຕາມຊົນນະບົດຫລາຍແຫ່ງແລະໄດ້ເຮັດໃຫ້ເດັກນ້ອຍຂອງລາວ ໄດ້ມີໂອກາສໄປເຂົ້າໂຮງຮຽນ, ປະມານ 70 ເປີເຊັນຂອງຄົນລາວອ່ານໄດ້ຂຽນເປັນພາສາລາວ, ໄດ້ເລີ່ມມີນັກວິຊາການຝ່າຍຄຣູ, ຝ່າຍໝໍ, ດ້ານກະສິກັມ, ດ້ານສັຕະວະແພດ, ດ້ານການກໍ່ສ້າງ, ດ້ານເສຖາກິຈການເງິນ, ດ້ານການຄ້າ, ການປົກຄອງ ຕໍ່ໆໄປ ທຸກພະແນກຢູ່ຕາມກະຊວງທະບວງກົມຕ່າງ ໆ.

ໃນປີ 1973 ຕອນມີສັນຍາລາວຮວມລາວ, ປະຊາຊົນລາວ ທົ່ວປະເທສ ຫວັງຢາກເຫັນສົງຄາມ ອັນຍືດເຍື້ອຍາວນານນັ້ນ ສິ້ນສຸດລົງ, ຢາກເຫັນລາວທ້ອນໂຮມກັນເປັນອັນໜຶ່ງອັນດຽວ, ຢູ່ຮ່ວມກັນ ດ້ວຍຄວາມ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສງົບສຸກ; ສ້າງສາ, ພັທນາປະເທສ ບ້ານເມືອງ ໃຫ້ຮູ່ງເຮືອງຈະເຣີນຄືປະເທສອື່ນເຂົາ, ແຕ່ໂຊກກັບບໍ່ເຂົ້າຂ້າງ ກັບກາຍເປັນສະພາບວູ້ນວາຍ ແຕກແຍກກັນ ຮ້າຍແຮງກວ່າດັ່ງທີ່ເຄີຍມີມາ ໃນ ປວັດສາຕຍ້ອນເລ່ຫລ່ງມທາງການເມືອງຂອງ ລາວ ຄ.ມ.ນ, ລູກນ້ອງແກວ ພັຄຄອມມຸຍນິສຕ໌ ອິນດູຈີນ ທີ່ໄດ້ທັບມ້າງສັນຍາຖິ້ມໄດ້ນຳເອົາຣະບອບໃໝ່ ລັຕທິ ຄ.ມ.ນ. ຜະເດັຈການມາປົກຄອງປະເທສໂດຽ ພັຄດຽວ ເຮັດໃຫ້ປະຊາຊົນລາວທົ່ວປະເທສ ເກີດຄວາມວູ້ນວາຍ, ໄດ້ເຮັດໃຫ້ຜູ້ນຳຝ່າຍຂວາ, ບຸກຄົນທີ່ມີຄວາມຮູ້, ຂ້າຣາຊການ, ນາຍທະຫາຣ, ນາຍຕຳຣວຈ ໄດ້ຖືກຈັບເອົາໄປຂັງຄຸກຈົນກັ່ງງ. ສ່ວນໜຶ່ງຂອງຄົນທີ່ຍັງເຫລືອເຂົ້າໃຈ ແລະ ຮູ້ເຫຕການດີ ມາກ່ອນ ກໍໄດ້ຫລົບໜີໄປຢູ່ຕ່າງປະເທສ ເພາະເຄີຍຖືກຫລືຕ້ອງການຫລີກລ່ຽງການໃສ່ຮ້າຍປ້າຍສີນາໆປະການຈາກ ຝ່າຍ ຄ.ມ.ນ. ສ່ວນທີ່ຍັງເຫລືອຢູ່ໃນປະເທສ ແມ່ນແຕ່ພວກບໍ່ຮູ້ທາງສີໄປ, ເລີຍກາຍເປັນຄົນຂາດສິຕທິ ເສຣີພາບ ທຸກຢ່າງ ເພາະຖືກພັຄ ລາວ ຄ.ມ.ນ. ບີບບັງຄັບ. ລາວ ຄ.ມ.ນ. ແມ່ນ ພວກບໍ່ມີສາສນາ ບໍ່ຮູ້ບາບ ແຕ່ຮູ້ລັທທິ ພະເດັຈການ ນັ້ນດີ.

**<u>ພັຄຄອມມຸຍນິສອິນດູຈີນ (Indochina Communist party).</u>** ແມ່ນແຜນວຽດນາມເໜືອ ກືນກິນລາວໃນທາງອອ້ມ ຍ້ອນຄວາມບໍ່ລອບຄອບຂອງລາວແດງ ຈຶ່ງໄດ້ໄປຮ່ວມແກວ ແລ້ວໄດ້ຂໍແກວ ຄ.ມ.ນ. ເຂົ້າມາຊ່ວຍ ເພື່ອໃຫ້ຕົນເອງໄດ້ເປັນຜູ້ນຳ, ແຕ່ຜົລສຸດທ້າຍ ເປັນຫູ່ນເຊີດ ເພື່ອໃຊ້ເລ່ຫລ່ງມມາເຂັ່ນ ຂ້າປະຊາ ຊົນລາວຢ່າງທາຣູນທີ່ສຸດ.



*<u>ຮູບທີ່ 180</u>. ພຍາໄຊຍະເພັຈຈຳພອນ ເຫລື້ອມ ອິນສີຊຽງໃໝ່ ຣັຖະມົນຕຣີ ວ່າການກະຊວງສຶກສາທິການ; ສີລປະກັມ ແລະ ກິລາຍຸວະຊົນ ໃນຣາຊອານາຈັກລາວ.*



*<u>ຮູບທີ່ 181</u>. ທ່ານຄຳຂຶງ ສຸວັນນະຣາສີ ອະທິບໍດີກຣົມສຶກສາທົ່ວໄປໃນ ຣາຊອານາຈັກລາວ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 2005, ແກວຄອມມຸຍນິສໄດ້ຂະຫຍາຍ ການສຶກສາ ທາງດ້ານພາສາ ວຽດນາມ ມາໃສ່ໃນລາວ, ຢູ່ໃນແຕ່ ລະຄອບຄົວ ຕ້ອງມີທູງ ຊາຕ ລາວແດງ , ທູງພັຄ ຄ.ມ.ນ. (ກາສີແດງ ມີຮູບ "ກຽວ ແລະ ຄອ້ນຕີ) ເກືອບທຸກຄອບຄົວ ອີກບໍ່ດົນຜູ້ບໍ່ຮູ້ພາສາ ວຽດຈະບໍ່ມີວຽກເຮັດງານທໍາ, ປະເທສລາວກໍຈະກາຍເປັນ ແຂວງໜຶ່ງຂອງປະເທສວຽດນາມ ມາຈາກພັຄຄອມມຸຍນິສອິນດູຈີນ ເປັນຜູ້ບົງການທັງໝົດ. ປະເທສລາວ ຈະເປັນຫົວເມືອງຂຶ້ນແບບໃໝ່ ຂອງຄອມມຸຍນິສຕ໌ວຽດນາມເໜືອ ແບບເອີ້ນວ່າ "ສະຫະພັນອິນດູຈີນ (The Indochina People )

<u>**ກະຊວງສຶກສາທິການ**:</u> ໃນປີ 1973-1975, ພນະທ່ານ ພຍາໄຊຍະເພັດຈໍາພອນ ເຫລື້ອມອິນສີຊຽງໄໝ່ ເປັນຣັຖະມົນຕຣີ ວ່າການກະຊວງສຶກສາ ແຫ່ງພຣະຣາຊອານາຈັກລາວ ແລະ ທ່ານຄໍາຂີງ ສຸວັນນະຣາສີ ເປັນອະທິບໍດີຂອງກະຊວງສຶກສາ.

## ສຸຂະພິບາລ (ຝ່າຍໝໍ)

ໃນສໄມບູຮານ ໝໍຍາລາວໄດ້ໃຊ້ຢາພື້ນເມືອງ ເອົາຮາກໄມ້ມາປິ່ນປົວຄົນເຈັບໄຂ້ໄດ້ພຍາທ ຢຸກຢາເຫລົ່າ ນັ້ນ ໄດ້ໄປຂຸດຄົ້ນເອົາຢູ່ຕາມປ່າດົງ ຫລືປູກໄວ້ຕາມບ້ານ. ບາງເຂຕທອ້ງຖິ່ນ ໃຊ້ໝໍເຢົາ, ໝໍປາບຜີ, ໃຊ້ ເວດມົນຄາຖາເປົ່າ, ຫລືໄລ່ຜີປອບອອກຈາກຄົນປວ່ຍ. ບາງທອ້ງຖິ່ນທີ່ຖືສາສນາພຸທ ກໍນິຍົມຄູບາ ພຣະ ຣົດນໍ້າມົນ ເພື່ອໃຫ້ກໍາລັງໃຈຜູ້ປວ່ຍ. ຄົນລາວໃນ ສໄມບູຮານ, ບໍ່ຮູ້ຮັກສາສຸຂພາບ, ຈຶ່ງເຮັດໃຫ້ຄົນລາວມີ ສຸຂະພາບບໍ່ສົມບູນອອ່ນແອ. ຢູ່ໃນລາວ ເຕັມໄປດ້ວຍພະຍາທໄຂ້ປ່າ (Malaria) ທີ່ເກີດຈາກຍູງກັດ, ຮີ້ນ ກັດ, ກີນນໍ້າບໍ່ສະອາດ ແລະຍ້ອນສິ່ງແວດລອ້ມຕ່າງໆ ຈຶ່ງມັກເຈັບມັກໄຂ້ ເຕີບໂຕບໍ່ສົມບູນ ເຕັ້ຍ ແລະ ຈອ່ຍ ບໍ່ແຂງແຮງ, ດັ່ງນີ້ ດ້ານກິລາລາວຈຶ່ງບໍ່ກ້າວໜ້າ. ຄົນລາວມັກແຕ່ງງານເອົາເມັຍ ທີ່ມີອາຍຸ ອ່ອນບໍ່ ເຖີງກະສຽນ ນອກຈາກນີ້ ກໍເບີ່ງ ແມ່ຍີງ ບໍ່ດີພໍ ເມື່ອເກີດລູກອອກມາ ກໍບໍ່ມີຄວາມສລາດຫລັກແຫລມ, ສຸຂະພາບ ກໍບໍ່ສົມບູນ ເຕັມສວ່ນ, ຄົນລາວຈຶ່ງມີອາຍຸສັ້ນ. ເມື່ອລາວໄດ້ຢູ່ໃນການປົກຄອງຂອງຝຣັ່ງເສສ ກໍມີການປ່ຽນແປງດີຂື້ນແດ່ ໂດຽສະເພາະແມ່ນຄົນລາວໄດ້ຮັບການສຶກສາ ທາງດ້ານພະຍາ ບາລ ມີຢຸກ ຢາໄປປິ່ນປົວ ຄົນໄຂ້ໄດ້ປວ່ຍ, ມີທ່ານໝໍເບີ່ງແຍງ, ມີໂຮງພະຍາບາລ ມີນາຍແພທ ທັນສະໄມ ຮູ້ການຜ່າ ຕັດ ເຫລົ່ານີ້ເປັນຕົ້ນ.

ໃນປີ 1920, ຢູ່ໃນປະເທສລາວ ມີໂຮງໝໍຢູ່ໃນເມືອງໃຫຍ່ໆເທົ່ານັ້ນ ຄື: ນະຄອນວຽງຈັນ ໂຮງໝໍມະໂຫ ສົດ, ໃນເມືອງສວັນນະເຂຕ, ໃນເມືອງຫລວງພຣະບາງ, ໃນເມືອງຊຽງຂວາງ, ໃນເມືອງປາກເຊ ບ່ອນ ລະ ໜື່ງແຫ່ງ ແຕ່ລະແຫ່ງຍັງຂາດຢາ, ຂາດອຸປະກອນທາງການແພທ, ຂາດນາຍແພທ ທີ່ມີຄວາມສໍານານໃນ ການປິ່ນປົວຄົນເຈັບ, ຮ້ານຂາຍຢາ ກໍບໍ່ມີ ເຖີງມີ ກໍຂາດເຂີນຢາຫລາຍທີ່ສຸດ.



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1954 ເມືອງລາວຈຶ່ງໄດ້ປັບປຸງ ຝ່າຍໝໍດີຂື້ນແດ່ເລັກນ້ອຍ ຍ້ອນວ່າມີນັກສຶກສາຫລາຍ ຄົນໄດ້ໄປຮຽນວິຊາແພທຢູ່ຕ່າງປະເທສ ໄດ້ກັບຄືນສູ່ປະເທສຂອງຕົນ, ຈຶ່ງພາໃຫ້ການປິ່ນປົວຄົນເຈັບ ດີຂື້ນ ກ້າວໜ້າແດ່. ໃນປີ 1955, ຣັຖບາລຝຣັ່ງເສສແລະສະຫາຣັຖ ໄດ້ຊ່ວຍເຫລືອອຸປະກອນການແພທ ອັນທັນສະໄມໄປຊ່ວຍສົງຄາມໃນອິນດູຈີນ ກໍເປັນໂອກາສໃຫ້ສຖານະການດ້ານແພທກ້າວໜ້າຂື້ນ.

ໃນປີ 1960, ຝຣັ່ງແລະສະຫາຣັຖ ໄດ້ຝຶກໂອບລົມວິຊາໝໍ ໃຫ້ນາງ ພະຍາບາລ ແລະ ທ່ານໝໍ ລາວຫລາຍຄົນ ໄດ້ສ້າງໂຮງໝໍແລະໂຮງຮຽນຝ່າຍໝໍ ໃຫ້ລາວຫລາຍແຫ່ງ ແຕ່ກໍໄດ້ຖືກເສີກສົງຄາມ ທຳລາຍໄປ ຕົວຢ່າງ ໂຮງໝໍ "ແສນສຸກ" ຢູ່ຊຳທອງ ແຂວງຊຽງຂວາງ ທີ່ສະຫາຣັຖສ້າງໃຫ້ ໄດ້ຊ່ວຍເຄື່ອງມື, ເຄື່ອງໃຊ້ທຸກໆຊນິດ, ຕັ່ງ, ຕຽງນອນ ໃຫ້ຄົນໄຂ້ ຫລາຍຮ້ອຍຕຽງ, ເຄື່ອງ ຖ່າຍຮູບ, ເຄື່ອງຜ່າຕັດ, ຢາປົວພະຍາດ ແລະເຄື່ອງໃຊ້ອື່ນໆຫລາຍຢ່າງ ທີ່ມີຄວາມຈຳເປັນຢູ່ໃນໂຮງໝໍເປັນເງິນຫລາຍລ້ານດອນລາ. ໂຮງໝໍແສນສຸກ ສາມາດຮັບເອົາຄົນໄຂ້ຫລື ທະຫາຣບາດເຈັບມື້ລະ ບໍ່ຕ່ຳກວ່າຮ້ອຍຄົນ. ສັດຕຣູໄດ້ເຂົ້າມາໂຈມຕີ ໃນປີ 1969 ກໍຕ້ອງໄດ້ເອົາເຄື່ອງເຫລົ່ານັ້ນ ປະຖິ້ມຢູ່ກັບທີ່ ເອົາອອກໄປບໍ່ໄດ້ຈັກຢ່າງ ໄດ້ຖືກສັດຕຣູທຳລາຍຖິ້ມໝົດກ້ຽງ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາກທີ່ 16.

# ການເມືອງລາວ ແມ່ນນະໂຍບາຍຂອງລາວບໍ?

ໃນປີ 1973 ມີນັກຂ່າວຊາວອາເມຣິກັນຄົນນຶ່ງ ເດີນທາງໄປຢ້ຽມຢາມລາວ, ແລ້ວເຂົ້າໄປພົບກັບທ່ານ ອະທິບໍດີ ທີ່ກະຊວງມະຫາດໄທ ຢູ່ນະຄອນວຽງຈັນທນ໌, ນັກຂ່າວຊາວທ່ານນັ້ນ ໄດ້ອອກໄປທ່ຽວຢ້ຽມຢາມ ສະຖານທີ່ຕ່າງໆໃນເຂດບໍຣິເວນນະຄອນວຽງຈັນທນ໌ ໂດຍສະເພາະ ແມ່ນພື້ນທີ່ ມີໂຄງການພັທນາ, ການ ສຶກສາ, ບ່ອນຝຶກຫັດຕ່າງໆ ພິເສດ ແມ່ນພະແນກການປົກຄອງຂອງລາວ. ພໍກັບມາເຖິງຫ້ອງປະຊຸມ ທີ່ ກະຊວງມະຫາດໄທ ນັກຂ່າວຊາວອາເມຣິກັນຄົນນັ້ນ ໄດ້ຕັ້ງຄຳຖາມໃນທີ່ປະຊຸມວ່າ "ຄົນລາວມີຄວາມ ຝັນບໍ?" ທ່ານອະທິບໍດີລາວ ຕອບວ່າ "ລາວບໍ່ຝັນກາງເວັນ ມີແຕ່ຝັນກາງຄືນເທົ່ານັ້ນ" ພໍນັກຂ່າວຊາວ ໄດ້ຍິນຄຳຕອບດັ່ງນັ້ນ ກໍເລີຍບໍ່ຖາມຫັຽງຕື່ມອີກ.

ຄຳຖາມແລະຄຳຕອບ ມີຄວາມໝາຍສຳຄັນທີ່ສຸດ, ຖ້າຜູ້ທີ່ຕັ້ງຄຳຖາມ ຫາກບໍ່ຮູ້ພື້ນຖານຂອງບຸກຄົນທີ່ຕົນ ຖາມ, ບາງເທື່ອ ຄຳຖາມນັ້ນອາດຈະເຮັດໃຫ້ເຂົ້າໃຈຜິດ ຫລືບໍ່ເຂົ້າໃຈຕໍ່ຄຳຖາມ ກໍເປັນໄດ້. ຄຳຖາມຂອງ ນັກຂ່າວຊາວນັ້ນ ອາດເປັນຄວາມຫວັງຂອງຄົນລາວ ແຕ່ຖ້າທ່ານຜູ້ທີ່ຕອບຄຳຖາມນັ້ນ ໄດ້ຕອບໄປຕາມທີ່ ຕົນໄດ້ຍິນ ໂດຍບໍ່ໄດ້ຄຳນຶງເຖິງຄວາມໝາຍ ແລະບໍ່ໄດ້ໃຊ້ຄວາມລະວັງຄິດກ່ອນຈຶ່ງຕອບ ອາດເຮັດໃຫ້ຜູ້ ຕັ້ງຄຳຖາມນັ້ນງົງ ແລະຄິດໄປໃນທາງອື່ນ ຫລື ແນວທີ່ເຮັດໃຫ້ຜູ້ຕັ້ງຄຳຖາມ ບໍ່ໄວ້ວາງໃຈ ຫລືບໍ່ແນ່ໃຈນຳ ດັ່ງນີ້ນັກຂ່າວຊາວຄົນນັ້ນ ຈຶ່ງບໍ່ໃຫ້ຄຳຕອບ ບໍ່ໃຫ້ຄຳອະທິບາຍຫັຽງຕື່ມ.

ໃນກໍຣະນີນີ້ ກໍເວົ້າໄດ້ຍາກ ຜູ້ຕອບຄຳຖາມອາດຈະໃຊ້ພະຫຍາແດ່ກໍເປັນໄດ້ ເພິ່ນບໍ່ຢາກເວົ້າຄວາມຈິງ ເວົ້າແບບຕົງໄປຕົງມາ ເພາະຮູ້ສຶກລະອາຍໃນຕົວວ່າ ຄົນລາວສ່ວນຫລາຍຈະບໍ່ມີຄວາມຝັນຢາກໄດ້ຢາກ ດີທັຽງດ້ວຍຕົນເອງ ຖ້າຝັນກໍແມ່ນຕອນນອນ ແລ້ວຝັນໄປຕາມທັມະຊາຕເທົ່ານັ້ນ.

ເຖິງຢ່າງໃດກໍດີ ຂ້າຣາຊການລາວສ່ວນຫລາຍ ຍັງຢູ່ໃນຣະດັບການສຶກສາບໍ່ສູງ ຈຶ່ງບໍ່ຄ່ອຍເຂົ້າໃຈຕໍ່ວຽກ ບ້ານການເມືອງຂອງປະເທສຊາຕ ບໍ່ຮູ້ວິເຄາະ ຫລືຕິດຕາມສຖານະການຕ່າງໆ ຕອນມີການປ່ຽນແປງ ພາຍໃນປະເທສ ຫລືຢູ່ພາຍນອກປະເທສ. ການປ່ຽນແປງຕ່າງໆ, ພື້ນຖານຄວາມຮູ້, ດ້ານປະເພນີຂອງ ລາວແມ່ນ ຍັງຢູ່ໃນທ່າທີທີ່ເຂົ້າໃຈໄດ້ຍາກ ຍ້ອນປະເທສມີເສິກເສືອຍາວນານ, ການປົກຄອງໂດຍຜູ້ນຳ ທີ່ ມີການສຶກສາບໍ່ສູງ, ໄດ້ຈັບມາໃຊ້, ຫລື ໃຊ້ຜະເດັດຈການ ເອົາອຳນາຕ, ໄດ້ອຳນາຕຍ້ອນ ພັຄພວກ ຫລື



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພັຄການເມືອງ, ເປັນຈູ້ມເຈື້ອ, ເຜົ່າແຕກຕ່າງກັນ, ຈຶ່ງໂຮມກັນຍາກ ເຂົ້າໃຈກັນຍາກ ຕ່າງຄົນຕ່າງຊອກຫາ ຜົລປະໂຍດສ່ວນຕົວ ບໍ່ເຫັນແກ່ຜົລປະໂຍດສ່ວນຮວມ ຂອງປະເທສຊາຕບ້ານເມືອງ ຈຶ່ງພາໃຫ້ເກີດ ເສິກ ກາງເມືອງ, ມີການເມືອງອັນບໍ່ໝັ້ນຄົງ ຕລອດມາຫລາຍ ສັຕະວັດ (ຫລາຍຮ້ອຍປີ). ໃນພົງສາ ວະດານ ລາວເຮົາ ຈະເຫັນເຈົ້າລາວໄປຂໍໃຫ້ພະມ້າມາຕີລາວ, ຂໍໃຫ້ຂເມນມາຕີລາວ, ຂໍໃຫ້ໄທຍ໌ ມາຕີລາວ, ຂໍໃຫ້ ວຽດ ມາຕີລາວ. ສຸດທ້າຍປະເທສລາວ ຕ້ອງແຕກສລາຍ ປະຊາຊົນລາວ ກາຍເປັນຄົນຕ່າງດ້າວ. ບໍ່ດົນ ຜືນແຜ່ນດິນລາວ ຕ້ອງຕົກເປັນຂອງຕ່າງດ້າວ, ເພາະປະຈຸບັນດິນລາວ ຫລາຍ ກວ່າສາມສວ່ນສິບ(3/10) ໄດ້ຕົກເປັນຂອງວຽດນາມເໜືອ ຄ.ມ.ນ. ໂດຍກົງໄປແລ້ວ. ຕົວຢ່າງເສັ້ນທາງ ໂຫຈິມິນ ແມ່ນໄດ້ຜ່ານດິນ ແດນລາວ ແຕ່ດຽວນີ້ເສັ້ນທາງນີ້ ແມ່ນຊາຍແດນຣະຫວ່າງວຽດນາມ ແລະ ລາວ. ດິນດອນຕອ່ນຫຍ້າ ເບື້ອງຕິດກັບວຽດນາມຕາມລວງຍາວ ແຕ່ເໜືອ ຕລອດໃຕ້ ຂອງ ເສັ້ນທາງ ໂຮຈິມິນ ຕົກເປັນຂອງວຽດ ນາມໂດຍກົງ. ວຽດນາມໄດ້ຍັບຊາຍແດນເລິກເຂົ້າໄປໃນຜືນແຜ່ນດິນຂອງລາວ ບໍ່ຕ່ຳກວ່າ 20 ກີໂລ ແມຕຣ໌ ສຳຫລັບລວງກວ້າງ ແຕ່ ສຳຫລັບລວງຍາວແຕ່ເໜືອຕລອດໃຕ້ ຂອງ ປະເທສລາວ ບໍ່ມີໃຜ່ຮູ້ ບໍ່ມີ ຜູ້ໃດ ຕໍ່ວ່າໄດ້. ຍ້ອນລາວ ຄ.ມ.ນ. ຕິດໜີ້ເລືອດຂອງ ວຽດນາມເໜືອ.

ການສູນເສັຍຜືນແຜ່ນດິນລາວ ແລະ ຜົລະເມືອງລາວ ຍ້ອນນັກການເມືອງ ຂອງລາວ ຂາດຄວາມສຳນຶກ ວິເຄາະ ສະພາບການ ຂອງບ້ານເມືອງ ທີ່ຈະເກີດຂຶ້ນຄ້າງໜ້າ, ຂາດຣັຖສາຕ, ຂາດນັກສັງຄົມສາຕ, ສວ່ນ ຫລາຍ ນັກການເມືອງລາວມັກໃຊ້ ອຳນາຕ ຂອງພັຄພວກ ຄື ພັຄຄອມມຸຍນິສຕ໌ ປະຈຸບັນ ໂດຍບໍ່ໄດ້ຄຳນຶງ ເຖີງອານາຄົດ ຂອງປະຊາຊົນ ແລະ ປະເທສຊາຕ ວ່າຈະນຳໄປໃນ ທາງດີ ຫລື ທາງຮ້າຍ ຕົວຢ່າງ ກໍຄື ຕອນ ຣ.ອ. ກອງແລ ຣັບໃຊ້ຣະບອບຄອມມຸຍນິສຕ໌ ອັນມີ ເຈົ້າສຸພານຸວົງສ໌ ຫລອກໃຊ້ ທຳການຣັຖ ປະ ຫາຣ ໃນ ວັນທີ່ 9 ເດືອນສິງຫາ 1960, ນອກຈາກນີ້ ຍັງໄດ້ຕິດຕໍ່ຂໍ ກອງທະຫາຣ ຄ.ມ.ນ. ວຽດນາມເໜືອ ເຂົ້າໄປສນັບສນຸນ ປາບປາມກອງທັພແຫ່ງຊາຕລາວ ເຮັດໃຫ້ກອງທັພ ລາວແຕກສະລາຍໄປເປັນສາມ ຝ່າຍ ຂ້າກັນເອງ. ເຈົ້າສຸວັນນາພູມມາ ແລະ ເຈົ້າສຸພານຸວົງສ໌ ມີນະໂຍບາຍຄືກັນ ໄດ້ ນຳເອົາລະບອບ ການປົກຄອງ ຄ.ມ.ນ. ມາປົກຄອງລາວ ໂດຍ ອ້າງຕໍ່ໂລກພາຍນອກວ່າ ຢາກໄດ້ ການປົກຄອງແບບ "ເປັນ ກາງ" ເປັນສາກບັງໜ້າ ຕົບຕາປະຊາຊົນລາວ ແລະຊາວໂລກ. ແຕ່ ການບໍຣິຫານປະເທສ ນັ້ນ ແມ່ນ **ອ່ຽງຊ້າຍ 100 ເປີເຊັນ**.

ເມື່ອປະເທສລາວຕົກໄປຢູ່ໃນຣະບອບການປົກຄອງແບບ ຄ.ມ.ນ. ຊື່ໃໝ່ຂອງປະເທສ ຈຶ່ງເອີ້ນວ່າ ສປປລ, **ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ.** ເຈົ້າສຸວັນນາພູມາ ແລະເຈົ້າສຸພານຸວົງສ໌ ບໍ່ມີຊື່ສຽງ ຈາລຶກໄວ້ໃນປວັດຕສາຕຂອງ ສປປລ ມີແຕ່ຂອງທ່ານໄກສອນ ພົມວິຫານ ຜູ້ດຽວ ມີຊື່ສຽງ ເພາະໄກສອນ ເປັນນາຍ ເປັນລູກວຽດ ເກີດຢູ່ເມືອງວຽດນາມ ຫລັງຈາກພໍ່ຮ້າງແມ່ ຈຶ່ງໄດ້ຕິດຕາມພໍ່ ມາເຕີບ ໂຕຢູ່ເມືອງ ລາວ ແລະໄດ້ເປັນອາດີດຂ້າຣາຊການຝຣັ່ງເສສ ສໄມຝຣັ່ງເສສມາປົກຄອງລາວ ມີຄວາມຜິດ ດ້ານກົດ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໝາຍຫລວງ ຈຶ່ງໄດ້ໂຕນໜີໄປຮ່ວມມືກັບໂຮຈິມິນ ຜູ້ເປັນຫົວໜ້າ ຖືກປັ້ນໃຫ້ລຸກຂຶ້ນຕໍ່ສູ້ກັບຝຣັ່ງເສສ ເພື່ອເປັນການແກ້ແຄ້ນ ໂດຍອ້າງວ່າແມ່ນປົດແອກ ຈາກ ຈັກກະພັດຝຣັ່ງເສສ ຄວາມຈິງແລ້ວແມ່ນ ປົດແອກໄມ້ອອກ ແລ້ວໄດ້ເອົາແອກເຫລັກເຂົ້າມາໃສຄໍປະຊາຊົນລາວ. ໄກສອນ ພົມວິຫານ ຈຶ່ງເປັນຄົນມີອິທິພົນ ແລະ ສຳຄັນຢູ່ໃນ ພັກຄອມມຸຍນິສຕ໌ ອິນດູຈີນ.  ດັ່ງນີ້ ເຈົ້າສຸວັນນະພູມາ ແລະ ເຈົ້າ ສຸພານຸວົງສ໌ ຈຶ່ງບໍ່ມີປະວັດສາຕ ນັກຕໍ່ສູ້ໄວ້ ເພາະ ບໍ່ມີຊື່ຢູ່ໃນ ພັກ ຄ.ມ.ນ. ອິນດູຈີນ ແລະ ຄ.ມ.ນ. ບໍ່ຕ້ອງການເຊື້ອ ເຈົ້າ.






*ຮູບທີ່ 182 (ຊ້າຍ). ທ່ານໄກສອນ ພົມວິຫານເກີດວັນທີ່ 13 ເດືອນ ທັນວາ (December) 1920, ເຖິງແກ່ກັມ ວັນທີ່ 21 ເດືອນພະຈິກາ (November) 1992 ທີ່ນະຄອນ ວຽງຈັນ, ມີຮູບປັ້ນໄວ້ເປັນທີ່ລະລຶກວິຣະບຸຣຸດ ຜູ້ກ້າຫານ  ຂອງຊາຕລາວ. ຮູບນີ້ກຳລັງວາງແຜນເພື່ອມອບລາວ ໃຫ້ວຽດນາມເໜືອ ມາຄູມ. ລາວຈຶ່ງບໍ່ຈຳເປັນຕ້ອງມີກອງທັບ ແມ່ນວຽດນາມເທົ່ານັ້ນ ຄູ້ມກັນຄວາມປອດໄພ ຂອງປະຊາຊົນລາວ ຊອດວຽດນາມ.*
*ຮູບທີ່ 183 (ຂວາ). ທ່ານໄກສອນ ພົມວິຫານ ແລະເຈົ້າສຸພານຸວົງ ໃນປີ 1950.*

ຜູ້ໄດ້ຮັບຄຳຍ້ອງຍໍ ຈາກໄກສອນ ພົມວິຫານ ຫລາຍທີ່ສຸດ ແມ່ນນາຍພົນ ຄຳອ້ວນ ບູບຜາ ເປັນຜູ້ຮັບໃຊ້ທີ່ຊື່ສັຕໄດ້ທຳການ ຖອນແຂ້ວ, ຖອນເລັບ ຝ່າຍຂວາ ຢ່າງຂື້ນເຊີງ ໂດຍອ້າງເອົາ ສັນຍາ ອານຸສັນຍາ 18 ຂໍ້ ທີ່ເຊັນກັນຢູ່ທີ່ວຽງຈັນທນ໌ ໃນປີ 1973 ເປັນເຄື່ອງມື ແລະ ເປັນແຜນການ ເປົ່າຫູ ເຈົ້າໜ້າທີ່ ແລະ ຜູ້ນຳລາວ ຝ່າຍຂວາ ຫລາຍຄົນ ທີ່ດ້ອຍຄວາມຄິດ ສຸກງ່າໃດ ກິນງ່ານັ້ນ ໄດ້ເຂົ້າຮ່ວມມືກັບ ລາວ ຄ.ມ.ນ. ສ້າງສຖານະການ ປັ່ນປ່ວນ ເຮັດໃຫ້ຄວາມຖືກຕ້ອງປອງດອງ ຂອງຊາຕແຕກສະລາຍ.  ໃນທີ່ສຸດແມ່ນເປັນການເຈຕະນາລະເມີດ ສັນຍາ ໃນປີ 1973 ຈາກລາວ ຄ.ມ.ນ. ຜູ້ຮັບໃຊ້ແບບແຜນຂອງ ວຽດນາມເໜືອ ຄ.ມ.ນ. ເພື່ອ ກືນກິນລາວ.

ການລະເມີດດັ່ງກ່າວບໍ່ໄດ້ເຫັນ ໝູ່ປະເທສ ທີ່ໄດ້ລົງລາຍເຊັນຢູ່ໃນສັນຍາ ທັງສາມທີ່ເຊັນກັນ ໃນປີ 1954, 1962 ແລະ 1973, ຊອກຫາທາງແກ້ໄຂ ຫລື ຊອມເບິ່ງເຫຕການ ແມ້ແຕ່ນ້ອຍ  ແຕ່ຕົງກັນຂ້າມປະເທສເຫລົ່ານັ້ນ ໄດ້ປ່ອຍປະລະເລີຍ ຕໍ່ການກະທຳຜິດ ຂອງຜູ້ໄດ້ໂອກາສ ຢາກຄອບຄອງປະເທສລາວ ເປັນຫົວເມືອງຂື້ນແບບໃໝ່ຢ່າງສະບາຍ. ຜູ້ລະເມີດໄດ້ ກຳນູທ່າງໃຊ້ອຳນາຕຕາມໃຈຊອບ ໂດຍບໍ່ເກັງອຳນາຕສານ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໂລກເລີຍ ດັ່ງນີ້ ໄກສອນ ພົມວິຫານ ຈຶ່ງໄດ້ເຊັນມອບ ປະເທສລາວໃຫ້ວຽດນາມເໜືອ ເອົາໄປຄູມ 25 ປີ ຫລັງຈາກ 25 ປີແລ້ວຕ້ອງໄດ້ເຊັນຕໍ່ໄປເລື້ອຍໆ ເທື່ອລະ10 ປີ ຢ່າງບໍ່ມີສິ້ນສຸດ ແລະ ບໍ່ມີທາງແກ້ໄຂໄດ້ (1977-2002= 25 ປີ ຫລັງຈາກນີ້ ກໍຕ້ອງເຊັ່ນຕໍ່ແຕ່ລະເທື່ອ 10 ປີ ບໍ່ມີວັນສິ້ນສຸດ).

ພີ່ນ້ອງປະຊາຊົນລາວ ທຸກຖ້ອນໜ້າ ຄວນອ່ານ ແລະຈຳໄວ້ວ່າ ການກະທຳຂອງ ນາຍພົນ ຄຳອ້ວນບູບຜາ ຜູ້ຮັບໃຊ້ແຜນການ ພັດຄອມມຸຍນິສ ອິນດູຈີນ ລົບລ້າງປະເທສຊາຕ ຂອງຕົນ ແລະ ເຜົ່າພັນຂອງຕົນເປັນ ໄປໄດ້ຢ່າງໃດ? ພວກຂ້າຣາຊການທີ່ ດອ້ຍຄວາມຄິດ, ສຖາບານນັກສຶກສາລາວຜູ້ ດອ້ຍ ການສຶກສາ ບໍ່ ລອບຄອບ ທີ່ໄດ້ສນັບສນຸນ ແຜນການຂອງ ນາຍພົນ ຄຳອ້ວນບູບຜາ ໃນເວລານັ້ນ ຄວນສຶກສາ ພິຈາຣະ ນາ ໃຫ້ຖວ້ນຖີ່ ເສັຍກ່ອນ ບໍ່ແມ່ນໄດ້ທຳຜິດໄປແລ້ວ ຈຶ່ງຄິດຕາມພາຍຫລັງ ມັນສາຍເກີນໄປແລ້ວ ຈະແກ້ ກໍ່ບໍ່ມີຄວາມໝາຍຫັຽງ ເພາະວ່າ ຜູ້ທີ່ໄດ້ຮັບຄວາມທຸກທໍຣະມາຣ ລ້ວນແລ້ວແຕ່ແມ່ນ ພໍ່ແມ່, ເຈົ້ານາຍ ຂອງຕົນ ແລະ ປະເທສຊາຕ ກໍຖືກຫລົ້ມຈົມ ຈົນໝົດກັຽງ ຈະແມ່ນຝ່າຍໃດຜິດ ຫລື ຖືກ ກໍຄວນຮ່ວມມືກັນ ແກ້ໄຂ ປຶກສາຫາລືກັນໃນທາງສ່ວນຮ່ວມຂອງຊາຕ ຕາມທີ່ຄວນ.

ຂໍເຊີນພີ່ນ້ອງປະຊາຊົນລາວພາກັນອ່ານເບິ່ງ ຢູ່ໃນບັນທຶກ ທັງໝົດຂອງ ນາຍພົນ ຄຳອ້ວນ ບູບຜາ ທີ່ເປີດ ເຜີຍໄຊຍຊນະຂອງ ພັດ ຄອມມຸຍນິສ ລາວແດງ ໃນປີ 1975 ແຕ່ເອົາມາຂຽນເປີດເຜີຍໃນປີ1995 ຊາວ ປີຜ່ານມາ ຫລັງຈາກໄກສອນ ພົມວິຫານ ໄດ້ຕາຍໄປແລ້ວ, ພີ່ນ້ອງລາວທຸກຄົນຈະເຂົ້າໃຈວ່າ ໄຊຍຊນະ ນັ້ນເປັນຂອງຜູ້ໃດແທ້? ຂອງລາວ ຫລື ຂອງ ວຽດນາມ ຄ.ມ.ນ? ຍ້ອນການກະທຳດັ່ງກ່າວ ປະຊາຊົນ ລາວ ປະມານໜຶ່ງລ້ານ ຄົນໄດ້ໜີອອກຈາກ ປະເທສ, ໄດ້ໄປຕາຍໃນຣະຫວ່າງກາງທາງ ໃນເວລາໜີ, ຖືກ ຈັບໄປຂາຍ ແລະ ກັບກາຍເປັນອົພະຍົບໄປຢູ່ ຫລາຍປະເທສ ທົ່ວໂລກເທົ່າທຸກວັນນີ້, ເໜືອໄປກວ່ານີ້ ຜູ້ນຳ ຝ່າຍຂວາ 46 ພັນຄົນ ທີ່ໄດ້ຖືກຈັບເອົາໄປທໍຣະມານ ຂ້າຖິ້ມ ຢ່າງໂຫດຫ້ຽມຮ້າຍມະນຸດສະທັມທີ່ ສຸດ ຢູ່ສູນສັມມະນາ ດັດສ້າງເມືອງວຽງໄຊ ແຂວງຫົວພັນ ຢ່າງບໍ່ມີສານໂລກໃດ ຈະຊ່ວຍໄດ້.

ນາຍພົນຄຳອ້ວນ ບູບຜາ ໄດ້ຂຽນໃນປີ 1995 ວ່າ"ເຮັດແນວໃດ ຈະຮັກສາ ຕົ້ນດອກຈຳປາໄວ້ໄດ້ " ມັນ ຫລ້າສະໄມໄປແລ້ວ ນາຍພົນ ຄຳອ້ວນບູບຜາເອີຍ! ໄກສອນ ພົມວິຫານ ໄດ້ເຊັນມອບ ປະເທສ ລາວ ໃຫ້ ວຽດ ຄອມມຸຍນິສຕ໌ ມາປົກຄອງ ລາວໃນລະຍະ 25 ປີ ພໍດີໃຫ້ ລູ້ນລູກຊອດ ວຽດ ໄດ້ເຕີບໂຕມີອາຍຸ ພໍດີ ມາເປັນນາຍ <u>ລາວທັງຊາຕແລ້ວ</u>.

ຜູ້ນຳລາວຫລາຍຄົນ ໄດ້ຂຽນປະວັຕສາຕຂອງເມືອງລາວ ຢູ່ພາຍໃນປະເທສ ແລະຢູ່ຕ່າງປະເທສ ໃຫ້ ຄວາມເຫັນດ້ານປະສົບປະການຂອງເຂົາເຈົ້າ ລືມຄວນໃຫ້ລູກຫລານລາວ ລູ້ນຫລັງໄດ້ຄົ້ນຫາ ມາອ່ານ ແລະ ຊອກຫາຂໍ້ມູນຄວາມຈິງວ່າ **ດ້ວຍເຫຕອັນໃດ ຈຶ່ງມີບັນຫາເກີດຂຶ້ນຢູ່ໃນລາວ ຫລາຍແທ້** <u>ເປັນມາໄດ້ ຢ່າງໃດ?</u> ແລະ <u>ຍ້ອນຫັຽງແທ້?</u> ລາວເຮົາ ຄວນຮູ້ປະວັຕສາຕນີ້ໃຫ້ດີ, ຄວນປ້ອງ ກັນບໍ່ໃຫ້ປະວັຕສາຕນີ້



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຊ້ຳຮອຍອີກ ຂໍໃຫ້ທຸກຄົນອ່ານປຶ້ມ ແຜ່ນການທຳລາຍ ທ້າຂັ້ນ ຂຽນໂດຍມະຫາກູ ສຸວັນນະເມທີ ຣັຖມົນຕຣີກະຊວງ ທັມະການ ຣັຖບາລ ປະສົມຄັ້ງທີ່ສາມ ແລະ ນາຍ ສະນັ່ນ ສຸທິຈັກ ເພື່ອທັບມ້າງຝ່າຍຂວາ.

ຄວາມສເນີນີ້ ແມ່ນການເປີດເຜີຍຂອງ ທ້າວ ສຸວັນນະຣາດ ຈິນດາວົງ ທີ່ຖືກຫລອກໄປໃຊ້ຢູ່ໃນຂບວນ 21 ອົງການ ຍ້ອນໄດ້ຮັບຜົລຕອບແທນຢ່າງເຈັບແສບເກືອບເອົາຕົວບໍ່ລອດ ເມື່ອລອດອອກມາຈຶ່ງໄດ້ເປີດເຜີຍ ໜ້າກາກ ຄວາມຈິງ ຂອງ ລາວ ຄ.ມ.ນ. ທີ່ຮັບໃຊ້ແຜນການຂອງ ວຽດນາມ ຄ.ມ.ນ. ເພື່ອໃຫ້ໄດ້ໄຊ້ຍຊນະຍ້ອນຢາກແກ້ແຄ້ນ ແລະ ຢາກໄດ້ອຳນາຕ ແຕ່ ຜົລສຸດທ້າຍ ແມ່ນພຽງແຕ່ເປັນຄົນຮັບໃຊ້ ຜົລປະໂຍດຂອງ ວຽດນາມເໜືອ ຄ.ມ.ນ. ເທົ່ານັ້ນ.

## ກົນອຸບາຍຂອງ 21 ອົງການ

### ໂດຍ: **ມະຫາກູ ສູວັນນະເມທີ**

ການທັນປ່ຽນໂດຍສັນຕິ ແມ່ນສົງຄາມແບບໃໝ່ ທີ່ເປັນໄພອັນຕະລາຍຮ້າຍແຮງ ແນໃສ່ລົບລ້າງ ພັຄ ແລະ ອຳນາດການປົກຄອງ ປະຕິບັດກ້າວເຖິງທຳລາຍປະຊາຊົນ, ທຳລາຍຄວາມເປັນເອກກະຣາດ ແລະ ທຳລາຍປະເທສຊາຕໂດຍ ບໍ່ຕ້ອງໃຊ້ອາວຸດ ແຕ່ ຫາກໃຊ້ ບາງວິທີການ ຄື:

- ກ. ເອົາການຕໍ່ສູ້ ດ້ານສັງຄົມນິຍົມເຂົ້າພາຍໃນປະເທສ ມ້າງແຕ່ໃນອອກນອກໂດຍ ເອົາຄົນພາຍໃນມ້າງ ຄົນພາຍໃນ. ພວກຈັກກະພັດ ມີແຕ່ຊ່ວຍຢູ່ໃນ ທາງນອກແມ່ນເພື່ອຊ່ວຍຊູ ແລ້ວກະທົບໃສ່.
- ຂ. ກຳເອົາແຕ່ລະລຸ້ນຄົນ ເພື່ອສ້າງໃຫ້ມ້າງກັນຢ່າງຍາວນານ ສ້າງເປັນດ່ານຫູງພານເຂົ້າໃນເພື່ອຕ້ານການປະຕິວັດ, ມ້າງເພພັຄ ແລະ ຄະບວນການປົກຄອງ.
- ຄ. ໃຊ້ທຸກວິທີທາງ ແລະຮູບແຜນການຕໍ່ສູ້ ທັງຖືກກົດໝາຍ ເທິງກົດໝາຍ ທັງເປີດເຜີຍ ແລະ ທັງປິດລັບ ສວຍໃຊ້ທຸກຊ່ອງຫວ່າງ ແລະກາລະໂອກາດອຳນວຍ ເປັນຕົ້ນແມ່ນ ຊ່ອງຫວ່າງ ແລະໂອກາດອຳນວຍການ ນຳໃຊ້ ກົນໂກງເສຖາກິດ ຕະລາດ ຈາກການເປີດກວ້າງ ການພົວພັນກັບຕ່າງປະເທສ ການຮ່ວມມືກັບການຊວ່ງເຫລືອຕ່າງໆ ການລົງທຶນ ແລະ ອື່ນໆ ອີກ.
- ງ. ໃຊ້ທາງມາດຕະການໆເມືອງ ແລະເສດຖາກິດ ວັດທນະທັມສັງຄົມທັງກົດຕ່າງໆໜີບເຕັງ ແລະ ຂົມຂູ່ທາງດ້ານການທະຫາຣ ໃນເມື່ອຈຳເປັນເພື່ອໜູນແລະກະຕູນ ຊຸກຍູ້ກຳລັງປະຕິການພາຍໃນ.
- ຈ. ດຳເນີນສົງຄາມຈິດທະສາຕ ໃຊ້ສົງຄາມຈິດຕະສາຕ ເປັນປ້າຍແຫລມເພື່ອໃສ່ຮ້າຍປ້າຍສີສ້າງຄວາມຫລົງໄຫລໄຝຝັນ ປະລະທັດສະນະ ຫລັກໝັ້ນປະຕິວັດໃຊ້ທຸກວິທີ ດຶງດູດຊື້ຈ້າງຈອບ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ອອຍ ເອົາພະນັກ ງານ ປະຊາຊົນໃຫ້ ຫລົງນິຍົມຊົມຊອບ ແລະໄປນຳພວກເຂົາຮັບໃຊ້ກົນອຸບາຍຂອງພວກເຂົາແຜ່ຜາຍ ລັທທິເສລີ ປະຊາທິ ປະໄຕ ຫລາຍພັດ ຫລາຍເກົ້າສິດມະນຸດ ແລະ ແບບແຜນ ດຳລົງຊີວິດ ອັນລາມົກມືນເມົາ.

**ກົນອຸບາຍ ທັນປ່ຽນ ໂດຍສັນຕິ ມີຄວາມອັນຕະລາຍ ແນວໃດ ຕໍ່ຊາຕ ຕໍ່ປະຊາຊົນ**

- ກ. ທຳລາຍຄວາມເປັນເອກກະຣາດຂອງຊາຕ.
- ຂ. ສ້າງກູ່ມກ້ອນຕ່າງ ໆຂື້ນ ແຕ່ລະທອ້ງຖິ່ນ ແຕ່ລະເຜົ່າ ຊົນຊາຕ ດ້ອຍກັນ.
- ຄ. ສ້າງຄວາມແບ່ງແຍກ ຄວາມຂັດແຍ້ງ ເຜົ່າຕ່າງ ໆໂດຍໃຊ້ ນະໂຍບາຍແຍ່ ເພື່ອໃຫ້ເຂົ້າໃຈຜິດເກີດຄວາມອາຄາດ ໝາດໝາງ ຕໍ່ກັນ ມ້າງຄວາມສາມາຄີປອງດອງ ອັນເປັນມູນເຊື້ອຂອງພີ່ນ້ອງລາວເຜົ່າຕ່າງ ໆໃນວົງນາຍາດແຫ່ງຊາຕ.
- ງ. ທາງດ້ານສາສນາ ກໍ່ຄວາມແບ່ງແຍກລະຫວ່າງຜູ້ເຊື່ອຖືສາສນາຕ່າງກັນ ບໍ່ໃຫ້ຜູ້ເຂົ້າສາສນາເຢຊູ ປະຕິບັດພັນທະຂອງພົນລະເມືອງໄດ້, ແມ່ນບໍ່ໃຫ້ຊາວໜູ່ມໄປເປັນທະຫາຣ, ບໍ່ໃຫ້ປະຊາຊົນຊາວບ້ານເຮັດວຽກລ່ວມ ໃນຍາມວັນສິນຂອງພະເຢຊູ.

## ແຜ່ນການທຳລາຍ

**ໂດຍ: ມະຫາກຸ ສູວັນນະເມທີ ແລະ ສະນັນ ສຸທິຈັກ**

- <u>ຂັ້ນ 1</u>- ໃຫ້ໃຊ້ໂຄງການ ການເມືອງ ສິບແປດຂໍ້ ເປັນຄອັນທັບມ້າງ ຝ່າຍວຽງຈັນທນ໌ ໂດຍໃຊ້ຄນະສະມາຊິກຂອງ 21 ອົງການເຂົ້າແຊກແຊງທຸກໆອົງການ, ທຸກໆກົມກອງ, ທຸກໆກະຊວງຂອງແຂວງ ແລະ ເອກກະຊົນ ຖ້າຫາກວ່າໂຄງການເມືອງບໍ່ໄດ້ຜົນ ກໍໃຫ້ເອົາກົດໝາຍຮັບປະກັນ ສິດທິ ພົນລະເມືອງລາວອອກໃຊ້ເປີດເຜີຍ.

- <u>ຂັ້ນ 2</u>- ຈັດຊູມນູມ ຈັດປະທວ້ງ ຈັດເດີນຂະບວນ ເພື່ອທັບມ້າງບຸກຄົນສຳຄັນຂອງຝ່າຍຣັດຖະບານວຽງຈັນທນ໌ ຄື: ຂ້າຣາຊການ,ທະຫາຣ, ຕຳຣວຈ ແລະ ຕລອດ ພໍ່ຄ້າ ຊາວຂາຍ.

- <u>ຂັ້ນ 3</u>- ເຮັດໃຫ້ບຸກຄົນຝ່າຍວຽງຈັນທນ໌ ຜູ້ບໍ່ມັກສັນຕິພາບ ອອກໜີຈາກປະເທສ ແລະ ຜູ້ມັກສັນຕິພາບຕ້ອງໄດ້ເອົາໄປຮ່ຳຮຽນ ເພື່ອຕໍ່ຕ້ານກອງທັບຝ່າຍວຽງຈັນທນ໌ ຕ້ອງໄດ້ເກັບອາວຸດເຂົ້າສາງເສັດ ແລ້ວກໍຈັດເດີນຂບວນໃຫ່ຍເພື່ອລົບລ້າງອຳນາຕການປົກຄອງເກົ່າຂອງຝ່າຍວຽງຈັນທນ໌ ເລີ້ມແຕ່ ບ້ານ, ເມືອງ, ແລະ ແຂວງ ໃນເດືອນສິງຫາ ວັນທີ່ 23, 1975 ທີ່ເດີນພຣະທາດຫລວງ ນະຄອນຫລວງວຽງຈັນທນ໌.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- <u>ຂັ້ນ 4-</u> ແຍກເອົາຜູ້ທີ່ຈະໃຊ້ວຽກຕໍ່ໄປ ອອກຈາກພວກທີ່ຈະບໍ່ໃຊ້ວຽກ ແລ້ວເອົາໄປສັມມະນາ, ເອົາໄປດັດສ້າງ ໂດຍຫາເຣື່ອງໃສ່ວ່າ ພວກນີ້ຕ້ານການປະຕິວັດ ຂອງປະຊາຊົນ ແລ້ວເອົາຂຶ້ນໄປ ກັກຂັງໄວ້ ໃນເຂດປົດປ່ອຍເກົ່າໂດຍຖືຫລັກການທີ່ວ່າ ຂ້າພະຍາດ ແກ້ເອົາຄົນ ຖ້າຫາກຜູ້ທົນໄດ້ກໍພົ້ນອອກມາ ຖ້າຫາກທົນບໍ່ໄດ້ ກໍຊິດໃຊ້ກັມທີ່ຕົນ ໄດ້ກໍ່ໄວ້ກັບປະຊາຊົນ ຖ້າຫາກຍັງດື້ດ້ານຢູ່ ກໍຕ້ອງໃຊ້ວິທີການຣູນແຮງຈົນເຖິງຂັ້ນຂ້າຖິ້ມ ຫລືໃຫ້ກິນຢາສັງ ຖ້າບໍ່ຕາຍກໍໃຊ້ການຫັງບໍ່ໄດ້ (ສ້າງເອົາບຸກຄົນໃໝ່ ຈາກສູນ ສັມມະນາ, ສູນດັດສ້າງ ເພື່ອຈະໄດ້ກັບຄືນມາເຮັດ ວຽກຕາມແຜນຕໍ່ໄປ ແບບລະຍະສັ້ນ ແລະ ລະຍະຍາວ ຂອງອົງການ. ໃນສູນສັມມະນາຕ້ອງເລືອກສ້າງຕຽມເອົາພວກທີ່ຈະໃຊ້ວຽກຕໍ່ໄປຢູ່ຂ້າງນອກໃຫ້ຢູ່ດີ ກິນດີກວ່າພວກຢູ່ຂ້າງໃນ.)



*<u>ຮູບທີ່ 184</u>. ນັກໂທສ ທີ່ຖືກໄປສັມະນາ ຢູ່ສູນ ຄຸກ ວຽງໄຊ ແຂວງຫົວພັນ ຖືກຜູ້ຍິງ ເອົາປືນຈໍ້ ເຝົ້ານັກໂທສແບບທໍຣະມານທີ່ສຸດຂອງຊີວິຕ.*

ແຜນແລະນະໂຍບາຍໃນການດັບສູນ ຂ້າຣາຊການພະແນກການ ປົກຄອງ, ຕຳຣວດ, ທະຫາຣ, ນັກຮຽນ ແລະເຍົາວະຊົນຂອງຣັດຖບານຝ່າຍວຽງຈັນທນ໌ ໃນລະຍະສັ້ນ ພາຍຫລັງປົດປ່ອຍປະເທສລາວ ໄດ້ມາເປັນສຳເຣັດ. (ອັນນີ້ແມ່ນນະໂຍບາຍຂອງຝ່າຍທະຫາຣ ແຕ່ຕ້ອງໃຊ້ແຜນສົງຄາມຈິດຕະສາຕ ປະກອບໄປດ້ວຍກັນ). ພວກຂ້າຣາຊການ, ຕຳຣວດ ແລະ ທະຫາຣຕ້ອງຖືກສັ່ງຈາກຂັ້ນເທິງໃຫ້ໄປຮັບການຮ່ຳຮຽນໃນເຂດປົດປ່ອຍເກົ່າ ສວ່ນແຜນດັດສ້າງນັ້ນຂຶ້ນຢູ່ຕາມແຜນຂໍ້ທີ່ ສີ (ນຳ້ເບີ 4) ແຜນດັບສູນພວກນາຍທະຫາຣ ຂອງຣັຖບາລ ຝ່າຍວຽງຈັນທນ໌ໃນເມື່ອເຂົາເຈົ້າ ບໍ່ມັກສັນຕິພາບ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສິ່ງຕົວແທນ **ຂອງ 21 ອົງການ** ທີ່ໄດ້ຜ່ານການຝຶກຫັດ ໃນດ້ານສົງຄາມຈິດຕະສາດ ຂຶ້ນໄປເປັນຕົວແທນ ໃນການຕໍ່ສູ້ ໂດຍອີງໃສ່ນະໂຍບາຍຂອງການດັບສູນ ໃນລະຍະສິບປີ ແຜນການ ແມ່ນຕົວແທນຂອງ 21 ອົງການຕ້ອງເປັນຜູ້ພາໃນການຕໍ່ສູ້ (ຕົວແທນຝ່າຍເຮົາຢູ່ຂ້າງໃນ ພວກປະຕິການຢູ່ຂ້າງນອກ). ອົງການ ໃໝ່ ທີ່ສ້າງຂຶ້ນໃນການດັບສູນ ສຳລັບທະຫານຂອງຝ່າຍວຽງຈັນທນ໌ ນັ້ນມີຊື່ວ່າ: **"<u>ເຈົ້າຟ້າ</u>"** ເຈົ້າຟ້າແມ່ນ ອີງຕາມປະວັດສາດຂອງລາວເຮົາ ສໄມສົງຄາມການຕໍ່ຕ້ານຝຣັ່ງເສສ ມາປົກຄອງລາວ ຍ້ອນປະ ຊາຊົນ ລາວເຮົາບໍ່ຍອມຈ່າຍພາສີ ປະຈຳປີ ໃຫ້ແກ່ຝຣັ່ງ. ຜູ້ນຳລາວສູງໃນຄາວນັ້ນແມ່ນທ້າວປັງໃຈ. ທ້າວປັງໃຈ ເຂົ້າໃຈດີວ່າສົງຄາມຕໍ່ຕ້ານຝຣັ່ງ ເປັນສົງຄາມທີ່ຮ້າຍແຮງ ຈຳເປັນຕ້ອງໃຊ້ແຜນສົງຄາມຈິດຕະສາດໂດຍ ປະກາສຕົນເອງຂຶ້ນເປັນຫົວໜ້າເຈົ້າຟ້າ. ຄຳສັບວ່າ **"ເຈົ້າຟ້າ"** ເປັນຄຳສັບເກົ່າແກ່ຂອງສົງຄາມຈິດຕະ ສາດ ທີ່ຝ່າຍສັດຕຣູ ບໍ່ມີຄວາມສາມາດໃຊ້ອາວຸດປືນທັນສະໄມປາບປາມໄດ້ ໃນການຕໍ່ຕ້ານຂອງວິລະບູ ຣຸດ ຜູ້ທຳອິດ. ເຈົ້າຟ້າ ໝາຍເຖິງ ຄົນທີ່ລູກກະສູນປືນ **"ຍິງບໍ່ເຂົ້າ."** ແຜນປະຕິບັດລະຍະສັ້ນໂຕນີ້ແມ່ນ ແຜ່ນທາງທະຫານ ທີ່ແນໃສ່ໃນການດັບສູນຝ່າຍວຽງຈັນທນ໌ ຢ່າງສິ້ນເສີນຮ້ອຍເປີເຊັນ ພ້ອມດ້ວຍ ປະ ຊາ ຊົນ ຂອງຣັຖບານ ທີ່ບໍ່ມີຈຸດປະສົງ ໃນດ້ານສັນຕິພາບ ເຂົ້າມາສົມທົບກັບກອງກຳລັງທັບ "ເຈົ້າຟ້າ".

ສ່ວນນະໂຍບາຍດັບສູນພວກເຍົາວະຊົນ ແລະ ນັກຮຽນນັກສຶກສາ ຂອງຣັຖບາລຝ່າຍວຽງຈັນ ຫລັງຈາກ ປົດປ່ອຍປະເທສ ມາເປັນຜົນສຳເຣັດແລ້ວ ຕ້ອງປາບພວກທີ່ເຄີຍເຫັນຄວາມຈະເຣີນມາກ່ອນ. ຂໍ້ປະຕິບັດ ຄື: ຂັ້ນເທິງອອກຄຳສັ່ງໃຫ້ບັນດາຊາວໜຸ່ມ, ນັກຮຽນ, ນັກສຶກສາລາວຂອງ ຣັຖບາລວຽງຈັນທນ໌ ໃຫ້ອອກ ໄປປະຕິບັດໜ້າທີ່ ເພື່ອປະເທສຊາຕ ໂດຍອີງໃສ່ການອາສາສະມັກໄປເປັນທະຫານ **ຂອງຣັດ** ແລະ ພັຄ ເພື່ອເຂົ້າໄປຊ່ວຍເປັນ ກອງກຳລັງ ປາບປາມພວກ "**ເຈົ້າຟ້າ**" (ພວກກະບົດ ຕ້ານສັນຕິພາບ) ຝຶກໃຫ້ຮຽນ ຮູ້ໃຊ້ອາວຸດ ຂະນາດເບົາ. ຂັ້ນເທິງເປັນຜູ້ຈັດສົ່ງອາວຸດ ແລະ ໜູນຫລັງ ຂອງການປະຕິບັດທາງທະຫານ. ລູກ ກະສູນຂະນາດເບົາແບບອາກາ 47 ແມ່ນສັ່ງມາເປັນພິເສດຈາກຂັ້ນເທິງ "ລູກກະສູນໃສ່ແປ້ງໝີ່ ພຽງ ແຕ່ ຍິງອອກໄກໄດ້ 25 ແມດ" ອອກປະຕິບັດການປາບປາມພວກກະບົດຊາຕ **"ເຈົ້າຟ້າ".** ພວກເຈົ້າຟ້າ ຈຶ່ງເປັນກອງກຳລັງທີ່ມີຄວາມສາມາດ ຕ້ານກອງກຳລັງປາບປາມ. ໃນທີ່ສຸດ ຂັ້ນເທິງຈຶ່ງນຳສົບຂອງບັນດາ ເຍົາວະຊົນທີ່ຖືກຂ້າຕາຍຢູ່ໃນສນາມລົບເວລາປາບປາມພວກກະບົດ **"ເຈົ້າຟ້າ"** ລົງມານະຄອນຫລວງວຽງ ຈັນທນ໌ ທີ່ເດີນພະທາດຫລວງ ເພື່ອຂໍຄວາມເຫັນດີຈາກພໍ່ແມ່ປະຊາຊົນລາວ ໃນການປາບປາມພວກ ກະບົດ **ເຈົ້າຟ້າ** ໃຫ້ສິ້ນເຊີງໂດຍໃຊ້ອາວຸດ

ທຸກໆຢ່າງໃນສົງຄາມທັນສະໄມພ້ອມດ້ວຍໃຊ້ຢາເບື່ອເຄມີ. ນີ້ເປັນນະໂຍບາຍໄຊຍຊນະໃນຄາວສຸດທ້າຍ ຂອງດ້ານທາງທະຫານແບບສົງຄາມຈິດທະສາດ ແລະ ສົງຄາມທາງທະຫານແບບທັນສໄມ ທີ່ປະກອບ ອາວຸດທັນສໄມ. (ມ້າງແຕ່ໃນ ອອກນອກ, ເອົາຄົນພາຍໃນມ້າງຄົນພາຍໃນ.) ໃນທີ່ສຸດ ຝ່າຍເຮົາຕ້ອງໃຊ້ ກອງກຳລັງທາງທະຫານ ທີ່ແທ້ຈິງໃນການດັບສູນຝ່າຍ ຣັຖບານວຽງຈັນທນ໌ ນາທີສຸດທ້າຍ. **(ຕອນທ້າຍນີ້ ແມ່ນເອົາວຽດມາຂ້າລາວ ໃຫ້ໝົດ** )



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ○ ຂັ້ນ5- ແຜນການທຳລາຍ "ຂັ້ນທີ່ທ້າ" ນັ້ນຄື: ທຳລາຍທຸກການຈັດຕັ້ງອັນມີລັກສນະທີ່ເປັນປໍລະປັກກັບ ຣັຖບາລຂອງປະຊາຊົນ ທີ່ຢູ່ໃນປະເທສທີ່ສາມ "ຕ່າງປະເທດ."

- ✓ ກ. ແຍກ ປັນຍາຊົນ, ແຍກ ວຸທທິຊົນອອກຈາກການຈັດຕັ້ງ, ອອກຈາກ ສະມາຄົມ ເພື່ອໃຫ້ເປັນປໍລະປັກເຊິ່ງກັນແລະກັນຕໍ່ໄປ.
- ✓ ຂ. ແຍກປັນຍາຊົນອອກຈາກປັນຍາຊົນ, ແຍກ ວຸທທິຊົນ ອອກຈາກ ວຸທທິຊົນ.
- ✓ ຄ. ເມື່ອທຳລາຍການຈັດຕັ້ງ ເປັນຜົນສຳເຣັດ ສວຍໂອກາດໃຊ້ການຈັດຕັ້ງເຮັດວຽກເພື່ອຜົນປະໂຍດໃຫ້ແກ່ພັຄ, ຣັຖ ຕັ້ງແຕ່ ສັງຄົມນ້ອຍຈົນເຖິງ ຂັ້ນສັງຄົມໃຫ່ຍ ຂອງຊາວລາວໃນຕ່າງປະເທສ.
- ✓ ງ. ໃຫ້ທຳລາຍບຸກຄົນທີ່ຖືກແຍກອອກມາແລ້ວ ດ້ວຍແຜນການເຮັດໃຫ້ຢູ່ໂດດດ່ຽວ, ເຮັດໃຫ້ໝູ່, ເພື່ອນຝູງ ລັງ ກຽດດ້ວຍວິທີການຕ່າງໆ ເພື່ອບໍ່ໃຫ້ມີຜູ້ຄົນມາຄົບຄ້າ ສະມາຄົມນຳຕໍ່ໄປອີກ.

ທ້າວ ສະເມີ ມຸທະໄລ ແມ່ນຫົວໜ້າຂອງ 21 ອົງການ ປະຈຳສຫະພັນຄູຣດົງໂດກ. ປະຈຸບັນທ້າວສະເມີແມ່ນຫົວໜ້າທີ່ຣັຖບາລລາວແດງ ສົ່ງມາປະຈຳການ ແລະ ຕິດຕາມແຜນການ ທີ່ຫ້າ ເພື່ອໃຫ້ໄດ້ ຜົນສຳເຣັດ**ໃນປະເທສຝຣັ່ງເສສ ແລະສະຫາຣັຖ ອາເມຣິກາ**. ທ້າວສະເມີ ມຸທະໄລໄດ້ຖືກ ຣັຖບາລລາວແດງ ປະຈຸບັນ ສົ່ງມາປະເທສຝຣັ່ງເສສ ໃນຖານະເປັນອົພະຍົບມາຈາກລາວ ເພື່ອໄປປະ ສານງານກັບ**ທ້າວຈັນສະໝອນ ວໍລະວົງ ( ຜູ້ນີ້ແມ່ນ ໝູ່ຂອງ ຢາງດາວ)** ວາງແຜນເຂົ້າໃຫ້ເຖິງສຖາບັນຂອງພຣະມະຫາກະສັດລາວ ໃຫ້ໃນທີ່ສຸດ ທຳລາຍ ຕະກູນຊະນະນິກອນ ໃຫ້ໄດ້ ພ້ອມດ້ວຍຣາຊຊະທາຍາດຂອງພຣະເຈົ້າແຜ່ນດິນລາວ ໃນປະເທສຝລັ່ງເສສ. ທ້າວເງິນ ສຳຣິດ ເປັນຜູ້ປະສານງານກັບສະຖານທູຕລາວປະຈຳປະເທສຝຣັ່ງເສສ.

ພວກທີ່ເຮັດວຽກໃຫ້ ຣັຖບາລ ລາວແດງ ໃນສະຫາຣັຖ ອາເມຣິກາ ມີຄື:
ທ້າວ ຄຳໃສ ໄຊສານ, ພ.ອ. ສຸວັນ ພັນສີ, ອາຈານ ສົມນຶກ, ພ.ອ. ຟອງສະມຸດ ແລະ ສົມຈິນ ພິໄຊຍະວົງ.

ລາວແດງ ແລະ ວຽດ ຄ.ມ.ນ. ໄດ້ຄົ້ນລົ້ມ ລົບລ້າງຣັຖບາລປະສົມ ທີ່ເປັນຄວາມຫວັງຄັ້ງສຸດທ້າຍ ຂອງປະຊາຊົນລາວ ທຸກຄົນ ໃຫ້ລົ້ມແຫລວ ລົງໄປໃນ ປີ 1975 ຢ່າງບໍ່ໜ້າເຊື່ອ ເພາະແຜ່ນການຂາຍຊາຕຂອງ **ລາວ ຄ.ມ.ນ.**



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ຄນະ 21 ອົງການ

ພວກ 21 ອົງການໄດ້ທຳການເຄື່ອນໄຫວອັນສຳຄັນ ແລະ ເປັນມ້າຕ່າງ ຕົວແຂງແຮງທີ່ສຸດ ຂອງພັຄ ຄ.ມ ນ. ພັຄພະເດັດການຢູ່ວຽງຈັນທນ໌ ສະໄມ1975 ໂດຽບໍ່ໄດ້ຍຳເກັງ ຕໍ່ສັນຍາໂຮມລາວ. ພວກທໍຣະຍົດ ຂາຍຊາຕໃຫ້ ວຽດ ຄ.ມ.ນ. ແມ່ນໃຜ ໃຫ້ເບິ່ງຕາມຮູບນີ້: ເບີ 1 ຮອດ ເບີ 12 ໃນຮູບລຸ່ມນີ້:




*<u>ຮູບທີ່ 185</u>. ນີ້ແມ່ນຮູບຖ່າຍຈາກໜ່ວຍຣາຊການລັບຂອງຝ່າຍວຽງຈັນທນ໌ໃນເດືອນມັງກອນ (January) 1975. ຮູບຂອງກຸ່ມນັກຮຽນລາວ ທີ່ກຳລັງໄດ້ຮັບຄ່າຈ້າງ ຈາກທ່ານໂສດ ເພຊຣາສີ ເພື່ອກໍ່ຄວາມວຸ້ນວາຍ ໃຫ້ແກ່ຣັຖບາລປະສົມສອງຝ່າຍ ໂດຽສະເພາະແມ່ນເພື່ອ ທຳລາຍຝ່າຍວຽງຈັນທນ໌ ແລະປະເທສຊາຕຂອງລາວ. ຄນະຜູ້ນຳ 21 ອົງກາຣທີ່ໄດ້ປະທ້ວງ ຂັບໄລ່ຝ່າຍຣັຖະບານ ວຽງຈັນທນ໌ ປີ 1974.*

- **<u>ນຳ້ເບີ 1</u>** ແມ່ນທ້າວບູນແທນ (ນັກຮຽນ) ກຳລັງທອບເງິນຄ່າຈ້າງກ້ອນໃຫ່ຍໂຕຢູ່ເທີງເອີກ,
- **<u>ນຳ້ເບີ 2</u>** ທ້າວບຸດສະບົງ ສຸວັນນະວົງ ເລຂາທິການກະຊວງຄັງ ໃນຣັດຖບານປະສົມ (ຝ່າຍລາວແດງ),
- **<u>ນຳ້ເບີ 3</u>** (ຕ້ອງຄົ້ນຫາ ວ່າແມ່ນໃຜ່),
- **<u>ນຳ້ເບີ 4</u>** ມະຫາກຸ ສູວັນນະເມທີ ຣັຖມົນຕຣີກະຊວງທັມມະການ ຣັຖບານປະສົມ (ສອງຝ່າຍລາວແດງ),
- **<u>ນຳ້ເບີ 5</u>** ທ້າວຄຳຟາງ (ນັກຮຽນ),
- **<u>ນຳ້ເບີ 6</u>** ທ້າວສະນິດ (ນັກຮຽນ) ທອບເງິນຄ່າຈ້າງກ້ອນໃຫ່ຍ,
- **<u>ນຳ້ເບີ 7</u>** (ຕ້ອງຄົ້ນຫາ ວ່າແມ່ນໃຜ),
- **<u>ນຳ້ເບີ 8</u>** ທ້າວຄຳຮ້ອຍ (ນັກຮຽນ ແມ່ນໂຕການສຳຄັນ ຂອງ 21 ອົງການ ຖືກຂ້າຕາຍຢູ່ສູນ ອົພະຍົບເມືອງໄທຍ໌),
- **<u>ນຳ້ເບີ 9</u>** ພ.ອ. ແຈ້ງ ໄຊຍະວົງ ຫລື ແສງອາຣູນ (ຝ່າຍລາວແດງ) ຫລັງຈາກຮ່ວມມືກັບ 21 ອົງການ ກໍ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໄດ້ ລັບຊັ້ນເປັນນາຍພົນ ແລ້ວຖືກຍ້າຍໄປປະຈຳການຢູ່ອົງການພັທະນາພູດອຍແຂວງຫລວງນ້ຳທາ.

[ກ່ອນໄດ້ຮ່ວມ 21 ອົງການນັ້ນ ແມ່ນອາດີດຜູ້ນຳຂອງ ທ້າວຄຳໄຊ ຊຶ່ງເປັນຜູ້ກໍ່ຕັ້ງພັຄເສຣີປະຊາທິປະໄຕໃນສະຫາຣັຖອາເມຣິກາ. ຢ່າລືມວ່າ ມີສອງພັຄເສຣີປະຊາທິປະໄຕ, ຄື ພັຄ ນຳພາໂດຍ ປະເກົ້າເຮີ ແລະ ມົວເຍັ່ຍລົງ ຢູ່ທີ່ປະເທສໄທ໌ຍ ແລະ ອີກພັຄນຶ່ງ ແມ່ນຂອງ ທ້າວຄຳໄຊ ຈຶ່ງພາໃຫ້ສັບສົນການຄົ້ນຫາພວກທໍຣະຍົດຢູ່ໃນຮູບນີ້].

- **<u>ນ້ຳເບີ 10</u>** ທ່ານສີດ ເພັຊຣາສີ ຣັຖະມົນຕຣີກະຊວງເສຖາກິດຣັຖບາລປະສົມ (ຝ່າຍລາວແດງ) ແມ່ນຜູ້ຈອບອອຍເອົາຄ່າຈ້າງໃຫ້ພວກນັກຮຽນທໍຣະຍົດ,
- **<u>ນ້ຳເບີ 11</u>** ພ.ອ. ໂພນໄຊ (ຝ່າຍລາວແດງ), ແລະ
- **<u>ນ້ຳເບີ 12</u>** ທ້າວຄຳໄຊ ຊູຣິນທອນ (ນັກຮຽນ) ແມ່ນຄົນສຳຄັນຄົນໜຶ່ງ ທີ່ສ້າງຄວາມປັ່ນປ່ວນ ແລະ ເປັນຜູ້ທີ່ຊາວລາວປາກເຊ ຮູ້ຈັກດີ. ປະຈຸບັນ ເປັນອົພະຍົບໜີໄປຢູ່ປະເທສການາດາ.

## ມະຕິວາງແຜນຂອງລາວແດງຢູ່ທີ່ເມືອງວຽງໄຊ

ກ່ອນເຂົ້າຍຶດອຳນາຕຈາກຝ່າຍຣັຖະບາລ ວຽງຈັນທນ໌ ແມ່ນແຜນນະໂຍບາຍເພື່ອ ໃຊ້ການຈັດຕັ້ງຣັຖບາລ ປະສົມ ສອງຝ່າຍ ຂຶ້ນ ໃນປີ 1974-1975)

1- ຈັດຕັ້ງຣັດຖະບາລປະສົມຊົ່ວຄາວຂຶ້ນ, ໂດຍໃຫ້ແຕ່ລະຝ່າຍມີຜູ້ຕາງໜ້າເທົ່າທຽມກັນພ້ອມກັນ ໃຫ້ຍູບສະພາຜູ້ແທນຣາຊດອນແລ້ວຈັດຕັ້ງ ຄນະຣັຖະມົນຕຣີປະສົມຂຶ້ນ ໂດຍໃຫ້ເຈົ້າສຸພານຸວົງສ໌ ເປັນປະທານ ແລະໃຫ້ເຈົ້າສຸວັນນະພູມາ ເປັນນາຍົກຄືເກົ່າ.

2- ວາງຮ່າງກົດໝາຍຣັຖທັມະນູນຂຶ້ນໃໝ່ ຊຶ່ງຢູ່ໃນວົງ ສິງຄາມການເມືອງ 18 ຂໍ້ ເພື່ອເປັນກົນ ຫລໍ້ຫລອກ

3- ໃຫ້ມີການປັກຫລັກໝາຍເພື່ອປິດຫູບາງຕາ ພ້ອມກັບຮັກສາກຳລັງ (ແກວ) ແລະຊຸກເຊື່ອງ ໄວ້ເບື້ອງຫລັງ.

4- ເຮັດທຸກວິທີທາງ ເພື່ອປົດປ່ອຍແລະຍຶດອຳນາຕຝ່າຍວຽງຈັນ ໂດຍໃຊ້ເລກົນຍົວະປະຊາຊົນ, ນັກສຶກສາ, ພໍ່ຄ້າຊາວຂາຍໂດຍໃຊ້ວິທີການຊື້ຈ້າງ ຈອບອອຍ ຕລອດຂ້າຣາຊການ, ທະຫາຣ,ຕຳຣວຈ ໃຫ້ເປັນກຳລັງໃຈສຳຄັນ.

5- ຍູບສະຖາບານຕ່າງໆເຊັ່ນ: ຊາຕ, ສາສະນາ, ພຣະມະຫາກະສັດ, ປ່ຽນທຸງຊາດ, ປ່ຽນການ ບໍຣິຫາຣໄປຢູ່ໃນທຸກກະຊວງທະບວງຄົມແລ້ວທຳການຫັນປ່ຽນຈັດຕັ້ງເປັນປະເທສ ສາທາລະ ນະລັດ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

6- ໃຫ້ທຳການປົດປ່ອຍເລື້ອຍໆໄປຮອດມະຫາສະມຸດໃນດ້ານວຽງຈັນ ຕາວັນຕົກສ່ຽງໃຕ້. ຫລັງຈາກນັ້ນແລ້ວ ຈຶ່ງປະກາດຂຶ້ນເປັນ ສະມາຄົມສະຫະພັນອິນດູຈີນ ຊຶ່ງສູນກາງຕັ້ງຢູ່ວຽດນາມເໜືອ (ຮາໂນຍ) ແລະປົກຄອງໂດຽກົງ ເປັນລະບອບສັງຄົມນິຍົມຄອມມູຍນິສ ຂອງວຽດນາມເໜືອ.

7- ດ້ວຍຄວາມສະມັກຄີສາມຊາດໃນອິນດູຈີນ ໃຫ້ທຳການປົດປ່ອຍ ໄປຍັງໃນພາກພື້ນ ປະເທສເອເຊັຍຕາວັນອອກສ່ຽງໃຕ້, ຈຸດສຳຄັນແມ່ນບັນດາປະເທສ ທີ່ມີຊາຍແດນຕິດກັບ ສາມຊາຕໃນອິນດູຈີນ.

## ນະໂຍບາຍແກ່ທະຫາຣຝ່າຍວຽງຈັນທນ໌ ແລະ ວ່າງປາວ

1- ທະຫາຣ, ຕຳຣວຈ, ຂ້າຣາຊການຝ່າຍວຽງຈັນທນ໌ຕ້ອງຖືກເອົາໄປສັມມະນາ ຢູ່ພາກເໜືອ ແຂວງຊຽງຂວາງ ແລະແຂວງ ຫົວພັນ.

2- ທະຫາຣຊັ້ນວ/ຣຕ ຕ້ອງໄປສັມມະນາ ຮັບໃຊ້ຊາຕຕລອດວັນຕາຍ ແລະ ບໍ່ໃຫ້ເປັນຫ່ວງກັບຄືນຫາຄອບຄົວ.

3- ທະຫາຣສັ້ນ ຣ.ຕ. ຫາ ຣ.ອ. ຕ້ອງເອົາໄປສັມມະນາ ເປັນຂ້ອຍຂ້າ ມ້າຕ່າງໃຫ້ລັດ ຕລອດວັນຕາຍ.

4- ທະຫາຣຊັ້ນ ພ.ຕ. ຫາ ພ.ອ. ຕ້ອງເອົາໄປສັມມະນາ ກັກຂັງໃສ່ໂທສ ຕລອດວັນຕາຍ.

5- ຂ້າຣາຊການຊັ້ນສູງ, ນາຍພົລ ຫລື ຂັ້ນຣັຖະບານຝ່າຍວຽງຈັນທນ໌ ຕ້ອງຖືກປະຫານຊີວິດໃຫ້ໝົດ.

<u>**ນະໂຍບາຍແກ່ ປະຊາຊົນລາວ ຝ່າຍວຽງຈັນທນ໌**</u>

1-ຕ້ອງເອົາໄປສ້າງສາ ປະເທສຊາຕ ຫລັງຈາກສົງຄາມ

2-ຕ້ອງເອົາໄປເປັນຄອ່ຍຂ້າ ມ້າຕ່າງ ໃຫ້ລັດ (ພັກຄອມມຸຍນິສຕ໌) ຮອດມື້ຕາຍ

<u>**ນະໂຍບາຍແກ່ປະຊາຊົນ ເຜົ່າມົ້ງ**</u>

1- ຕ້ອງພະຍາຍາມ ໃຊ້ແຜນປາບປາມດັບສູນຊີວິດ ຂອງປະຊາຊົນເຜົ່າມົ້ງ ເລີ່ມຕົ້ນປີ 1979-1981 ຫລື 1982 ຕ້ອງ ຖືເອົາເວລານີ້ເປັນໂອກາສ ທີ່ເໝາະສົມ ເພາະປະຊາຊົນມົ້ງ ມີໃຈດຳຝັ່ງເລິກຢູ່ໃນວັງຫົວໃຈຂອງເຂົາ.

2- ຕ້ອງດັບສູນຊີວິດຂອງ ຊາວມົ້ງ ຜູ້ມີອາຍຸ 5 ປີ ຂຶ້ນໄປເຖິງ 50 ປີ ໃຫ້ໝົດ ຈຳນວນພວກນີ້ ຄືຕອ່ນຊີ້ນທີ່ເນົ່າເໝັ້ນ ຈະເອົາມາລ້າງພຽງໃດ ກໍຍັງເໝັ້ນຢູ່.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ນະໂຍບາຍ ສົມມະນາ**

1- ຕ້ອງເອົາ ຕົນເອງດ່າປ້ອຍຕົນເອງ.
2- ຕ້ອງບັງຄັບໃຫ້ມີສຽງປາກ ດ່າຕົນເອງຢູ່ຕາມລັງພົນໃຈ ບໍ່ໃຫ້ຫລີ້ນນຳຜູ້ອື່ນ.
3- ຕ້ອງເອົາສິດ ແລະຜົນປະໂຍດຂອງປະຊາຊົນມາໂຄສນາເປັນຫລັກ.
4- ຕ້ອງເອົາປະເທສຊາຕມາເປັນຂອງປະຊາຊົນ ຕ້ອງອີງຕາມຈິດໃຈ ແລະ ຄວາມຫວັງຂອງເຂົາມາຈົນກວ່າໃຫ້ໄດ້ແລ້ວຕ້ອງໜົບຕີງທຸກຢ່າງໂດຽບໍ່ໃຫ້ມີສິດໃດໆທັງສິ້ນ.

**ນະໂຍບາຍເຈຣະຈາກັບຝ່າຍ ຣັດຖະບາລ ວຽງຈັນທນ໌**

1- ຖ້າຝ່າຍນັ້ນຫາກຍອມຮ່ວມມືກັນ ສາມາຄີກັນ ຕ້ອງປະຕິບັດຕາມຂໍ້ສະເນີຂອງເຂົາ
2- ເມື່ອທັງສອງຝ່າຍຮ່ວມມືໄດ້ແລ້ວຕ້ອງໃຫ້ມີສິດເທົ່າທຽມກັນ
3- ເມື່ອມີສິດ ແລະເອກະພາບເທົ່າທຽມກັນແລ້ວ ຕ້ອງໃຊ້ສິດ ແລະໜ້າທີ່ຂອງການປະຕິວັດ ປ່ຽນລົງແລະທັບມ້າງຂໍ້ຕົກລົງຕ່າງໆ ໂດຽບໍ່ໃຫ້ເວົ້າເຖີງ.

**ນະໂຍບາຍຂອງການປະຕິວັດ**

1- ນັກປະຕິວັດ ຕ້ອງໄດ້ຮັບໃຊ້ປະຊາຊົນ ແລະ ຮັບໃຊ້ປະເທສຊາຕ ຕລອດວັນຕາຍ
2- ນັກປະຕິວັດ ບໍ່ຕ້ອງເປັນຫວ່ງເປັນຍາຍຕໍ່ຄອບຄົວ ແລະ ຍາດຕິພີ່ນ້ອງຂອງຕົນເລີຍ
3- ຖ້າຫາກຜູ້ໃດຍັງເປັນຫວ່ງໄຍຕໍ່ຄອບຄົວ ພີ່ນ້ອງ, ບໍ່ຫວ່ງໄຍໃນຄວາມຮັບຜິດຊອບຂອງຕົນ ຜູ້ນັ້ນຕ້ອງໄດ້ຮັບການສົມມະນາເພີ່ມອີກ.

**ສົງຄາມ ດ້ານເສດຖາກິດ**

ດ້ວຍການອາສັຍຕາມອຳນາດເງິນຂອງຝ່າຍນັກສືບຣາຊການລັບຂອງໂຊວຽດ ເປັນພື້ນຖານ ຕ້ອງສົ່ງຕົວແທນໄປແປະປອມຢູ່ນຳກູ່ມເສຣີ ແລ້ວອາສັຍ ຫລອກເງິນມາແຈກຈ່າຍຢູ່ຕ່າງປະເທສ. ສ່ວນພາຍໃນປະເທສ ແມ່ນການບັງຄັບໃຫ້ໃຊ້ເງິນຂອງພັຄ ຊຶ່ງເອີ້ນວ່າເງິນປົດປ່ອຍນັ້ນເອງ.

**ໂຄງການສ້າງເສຖາກິດ ຢູ່ຕ່າງປະເທສ**

ແມ່ນການສົ່ງຜູ້ຕາງໜ້າຂອງຣັຖະບາລລາວ ຄ.ມ.ນ. ໄປຢູ່ໃນອຸປະທູຕ ແລະນາຍທຶນ ທີ່ມີຫົວຊຳນິຊຳນານ ໄປລີ້ຊອ້ນຢູ່ຕາມກູ່ມເສຣີ ເພື່ອຕັ້ງໂຮງງານຕ່າງໆເຊັ່ນ: ໂຮງຕົ້ມເງິນ, ໂຮງການ, ໂຮງງານບໍຣິ ສັດຢາ ສູບ, ໂຮງເລື້ອຍແລະໂຮງສີ ເປັນຕົ້ນ ເພື່ອເປັນການຫາລາຍໄດ້ໄວ້ຊື້ຈ້າງ ຈອບອອຍພວກທຸກຍາກ ແລະ ລູກຄ້າຕ່າງໆ ທີ່ຢູ່ຕາມແຕ່ລະຫົວເມືອງໃຫ່ຍໆ ແລະຊົນນະບົດ. ນອກຈາກນັ້ນ ກໍແມ່ນເພື່ອສຳຫລັບນັກການເມືອງຕ່າງໆ ຊຶ່ງຢູ່ໃນຄນະຣັຖະບາລປະເທສນັ້ນ ໃຫ້ສ້າງຄວາມແບ່ງແຍກ; ໃນວົງການຣັຖະບາລທຸກແຫ່ງ ແລະ ທຸກປະເທສທົ່ວໂລກ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**<u>ໂຄງການປາບປາມ ຝ່າຍວຽງຈັນຫນ໌ ແຕ່ ປີ 1975–1980</u>**

ໃນລະຍະນີ້ ຖືເອົານະໂຍບາຍຂອງລັດ (ພັຄອິນດູຈີນ) ມາເປັນວິທີການ ສັມມະນາດັດສ້າງຄົນ ການສ້າງຄົນ ແລະໃຊ້ວິທີການກວດລ້າງ ປາບປາມ ດັບສູນຊີວິດປະຊາຊົນ ລີ້ຊ່ອນໃນປ່າ ພວກປະຕິ ການ ທີ່ແຕກທັບແລະທະຫານ ແຕກທັບຢູ່ຕາມປ່າຕາມດົງທຸກແຫ່ງ ໃຫ້ສຳເລັດ. ທ້າຍປີ 1979, ປະກາດ ລົບລ້າງຣະບອບເກົ່າໃຫ້ຮາບກ້ຽງ. ປີ 1980 ເປັນປີປະກາດຣະບອບສັງຄົມນິຍົມ ວາງຮ່າງກົດໝາຍຣັຖ ທັມມະນູນ ຂຶ້ນໃໝ່ ຊີ້ງປົກຄອງດ້ວຍວຽດນາມເໜືອໂດຽກົງ ທຸກດ້ານ:

- ✓ ດ້ານຄຸນນະສົມບັດແຮງງານ ຢູ່ໃນລັກການປະຕິວັດເປັນຕົ້ນຕໍ **(ແມ່ນແກວຈິ່ງມີສິດ)**
- ✓ ດ້ານການຄ້າພາຍໃນປະເທສ ແມ່ນຍຶດເອົາເປັນຂອງລັດ ແລະການຈັດຕັ້ງສະຫະກອນກະເສດ ຂອງລັດ ເປັນຕົວແທນ.

**<u>ທ່ານ ສຸວັນນະຣາດ ຈິນດາວົງ ຂຽນວ່າ:</u>**

*ຕາມມະຕິວາງແຜນການຂອງພວກລາວແດງ ຍັງມີຫລາຍຢ່າງແຕ່ຈັບແລະຄົ້ນຫາບໍ່ໄດ້ ຂໍ້ສຳຄັນ ຄືທີ່ຢູ່ຂ້າງເທິງນີ້ ເພື່ອໃຫ້ທຸກຄົນສາມາດຮັບຮູ້ ນະໂຍບາຍອັນໂຫດຮ້າຍຂອງພວກລາວແດງ ທີ່ມີຕໍ່ປະຊາ ຊົນລາວ ແລະມັ້ງ ດີ ຫລື ຮ້າຍແຮງ ຂນາດໃດແທ້? (ຂໍຂອບໃຈນຳທ່ານສຸວັນນະຣາດຈິນດາວົງ ທີ່ໄດ້ຂຽນປະສົບປະການຂອງທ່ານໃຫ້ລາວເຮົາທຸກຄົນຮູ້ວ່າ ຄອມມຸຍນິສຕ໌ລາວແດງ ແມ່ນໃຜ ແລະເປັນສັຕ ຮ້າຍກາດ ພຽງໃດ.)*


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 17.

# ບັນຫາລາວເກີດໄດ້ດ້ວຍເຫຕໃດ?

ດ້ວຍເຫຕຜົລອັນໃດເມືອງລາວ ຈຶ່ງມີເວັນກັມຫລາຍແທ້ ແລະດ້ວຍເຫຕຜົລອັນໃດ ຄົນລາວຈຶ່ງມີແຕ່ຈອ່ງເວນ ຈອ່ງກັມຊຶ່ງກັນແລະກັນ ໂດຽບໍ່ມີມື້ຈົບສິ້ນຈັກເທື່ອ? ຂ້າພະເຈົ້າຜູ້ບັນທຶກປຶ້ມຫົວນີ້ ເຄີຍປະສົບບັນຫາມາຫລາຍຄັ້ງ ຈຶ່ງເຫັນວ່າ ບັນຫາທີ່ເກີດຜ່ານມາແມ່ນ: ມາຈາກໄດ້ຮັບຄວາມບໍ່ຍຸຕິທັມ, ມາຈາກຄວາມເຊື່ອຖືຂອງບຸກຄົນ (ດ້ານຈິດໃຈແລະສາສນາ), ມາຈາກເຮັດດ້ວຍບໍ່ມີເຫຕຜົນ ບໍ່ມີຫລັກການ, ບໍ່ມີກົດໝາຍ (ເຖີງມີ ກໍບໍ່ໃຊ້) ມາຈາກລັຕທິ, ຂາດການສຶກສາບໍ່ເຂົ້າໃຈ ແລ້ວໄປຮັບໃຊ້ ແຜນຂອງຊາຕຕ່າງດ້າວເອົາມາບັງຄັບຊາຕລາວ ໂດຽບໍ່ໄດ້ໃຊ້ສະຕິປັນຍາ ຊັ່ງນ້ຳໜັກວ່າ ສິ່ງທີ່ຈະກະທຳໄປນັ້ນ ມັນຈະມີຜົລດີຫລືຜົລເສັຍໃຫ້ຊາຕລາວບໍ? ເໜືອໄປກວ່ານີ້ ເມືອງລາວເປັນ ປະເທສ ທີ່ຂາດການຕິດຕໍ່ ທັງພາຍໃນ ແລະພາຍນອກປະເທສ, ບໍ່ມີການຝຶກຝົນ ພັທນາດ້ານຈິດໃຈໃຫ້ມີຄວາມຮັກແພງ ກັນ,ໃຫ້ມີຄວາມສະມາຄີຮັກຊາຕ, ຂາດຄວາມອົດທົນ ຍົກໂທສຕໍ່ກັນ, ເຮັດຫັຽງບໍ່ໄດ້ເຮັດດ້ວຍໃຈຈິງ, ມີແຕ່ໂລບ ດ້ວຍການເຫັນແກ່ຕົວ ບໍ່ເຫັນແກ່ສ່ວນລວມ ແລະອື່ນໆອີກຫລາຍແນວ. ເມືອງລາວເປັນປະເທສທີ່ຢູ່ໃນລະຫວ່າງກາງຂອງຫລາຍປະເທສ ທີ່ມີປະຊາຊົນລົ້ນເຫລືອ ຈຶ່ງມີການແຊກຊຶມແລະແຊກແຊງ ເຂົ້າໄປອາໄສຍໃຊ້ອຳນາຕ, ສ້າງຄວາມປັ່ນປ່ວນຫລາຍຢ່າງຢູ່ໃນລາວ ເຮັດໃຫ້ລາວ ບໍ່ມີຄວາມສາມາດ ຄວບຄູມສຖານະການແລະຄວາມປອດໄພ້ຍໄດ້.

## ສິ່ງທີ່ສ້າງບັນຫາ

**1-ມາຈາກຄວາມແຄ້ນ**

- **ຄວາມແຄ້ນ**ຂອງບຸກຄົນ ທີ່ໄດ້ຖືກທໍຣະມາຣ ຫລືຖືກກົດຂີ່ຂົ່ມເຫັງ, ຖືກໃສຮ້າຍປ້າຍສີໃສ່, ຫາເຣື່ອງໃສ່ ໂດຽບໍ່ມີຄວາມຜິດ ບໍ່ມີເຫຕຜົລ, ບໍ່ມີຄວາມຈິງ, ເພື່ອປະໂຍດສ່ວນຕົວຂອງ ຜູ້ນຳ, ຫລືພັຄພວກ.
- -**ການຊີງດີຊີງເດັ່ນ** ລະຫວ່າງບຸກຄົນ ຫລື ລະຫວ່າງພັຄພວກ, ພັຄການເມືອງ ຫລື ລັທທິ.

ດ້ວຍເຫຕຜົລທີ່ກ່າວມາຂ້າງເທີງນີ້, ຈຶ່ງຕົກເປັນເຫຍື່ອຂອງການແຊກແຊງ ຈາກຊາຕຕ່າງດ້າວ ທ້າວຕ່າງແດນ ຍົວະໃຫ້ຄົນລາວ ຂ້າຟັນລັນແທງກັນເອງ ຈົນກາຍເປັນເສິກສົງຄາມຍືດເຍື້ອຍາວນານ. ປະຊາຊົນລາວບໍ່ມີໂອກາສໄດ້ສ້າງສາ ພັທນາປະເທສຊາຕ ບ້ານເມືອງຂອງຕົນ, ພັທະນາຕົນເອງ, ເຮັດໃຫ້ພື້ນແຜ່ນ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ດິນລາວໄດ້ຕົກເສັຍໄປແຕ່ລະຕອນ ພາໃຫ້ແຄບເຂົ້າໄປທຸກທີ. ເມື່ອໃດໄຊຍຊນະ ຍັງບໍ່ເປັນຂອງປະຊາຊົນລາວ ແມ່ນຄວາມແຄ້ນນັ້ນຍັງຈະບໍ່ຈົບເປັນຈັກເທື່ອ, ຄອມມຸຍນິສຕ໌ລາວ ໄດ້ລ້າງແຄ້ນ ຝ່າຍຂວາຢ່າງ ອະຫັມຕອນທີ່ເຂົາໄດ້ໂອກາສ, ບໍ່ເທົ່ານັ້ນ ຍັງເອົາປະເທສໄປມອບໃຫ້ ວຽດ ຄ.ມ.ນ. ມາຄູມອີກ. ຄວາມແຄ້ນຂອງຄອມມຸຍນິສຕ໌ລາວ. ແມ່ນການປູທາງໄປໃສ່ບາບກັມ ເພາະເຂົາແກ້ແຄ້ນໂດຽບໍ່ມີຄວາມຍຸຕິທັມ ບາບກັມນັ້ນ ຈະຕາມສະນອງພວກມັນແນ່ນອນ. ການໃຫ້ອາໄພຍ໌ຊຶ່ງກັນແລະກັນນັ້ນ ເວັນກັມຈຶ່ງບໍ່ຕາມຕ້ອງ. ນີ້ແມ່ນສຸພາສິດລາວກ່າວໄວ້." ການແກ້ແຄ້ນເຣື່ອງສ່ວນຕົວ ບໍ່ຄວນເອົາມາເປັນ ເຣື່ອງສ່ວນລວມ ປະເທສຊາຕຈຶ່ງບໍ່ຈິບຫາຍ. ການສ້າງຄວາມສະມັກຄີ ປອງດອງຊາຕ ເປັນກະແຈ ນຳພາຊາຕໄປສູ່ ຄວາມອຸດົມສົມບູນ ທັ້ງເປັນຕົວຢ່າງ ທີ່ດີໃຫ້ໂລກເຂົາຊາລື.

## 2. <u>ມາຈາກຄວາມເຊື່ອຖື</u>

ບໍ່ມີຄວາມເຊື່ອກັນ ແລະ ຄວາມນັບຖືຊຶ່ງກັນແລະກັນ ແມ່ນຫົນທາງນຳພາໄປໃນທາງ ບໍ່ແນ່ນອນ ບໍ່ເຂົ້າໃຈກັນ ຈຶ່ງພາໃຫ້ເກີດມີຄວາມຂັດແຍ້ງກັນຂຶ້ນຢູ່ໃນປະເທສລາວດັ່ງ: ເປັນຊົນຊັ້ນແຕກຕ່າງກັນ, ແນວຄິດບໍ່ຄືກັນ, ຄວາມເຫັນ ບໍ່ຄືກັນ ແລະຖານະກໍບໍ່ຄືກັນ ຈຶ່ງພາໃຫ້ບໍ່ມີສັນຕິພາບໄດ້ ຍ້ອນບໍ່ມີຄວາມເຊື່ອ, ບໍ່ໄວ້ວາງໃຈ ຊຶ່ງກັນ ແລະ ກັນ.

- **<u>ກ/ ສາສນາ</u>**

ເມືອງລາວເປັນປະເທສນ້ອຍໆ ປະຊາຊົນກໍມີຈຳນວນນ້ອຍ ແຕ່ມີຫລາຍສາສນາ ນຳເຂົ້າໄປສິດສອນໃຫ້ຢູ່ໃນຄຳສັ່ງສອນສາສນານັ້ນ ມີຄວາມໝາຍແຕກຕ່າງກັນ ຕົວຢ່າງສາສນານຶ່ງ ສອນໃຫ້ຮູ້ຈັກຢ້ານບາບ ໃຫ້ທຳແຕ່ຄວາມດີ ບໍ່ໃຫ້ເຮັດຜິດຕໍ່ກົດໝາຍ ແຕ່ສາສນາອື່ນສອນໄປໃນທາງຜິດ ສອນວ່າເຮັດຊົ່ວໄດ້ດີ ເກັ່ງ ແລະໂຫດ ຈຶ່ງໄດ້ເປັນຈອມ ຂ້າຄົນແລ້ວໄດ້ຂຶ້ນສວັນ ພາໃຫ້ເກີດມີຄວາມຂັດແຍ້ງກັນຫລາຍຢ່າງ ເພາະປ່ຽນແປງຄຳສັ່ງສອນບໍ່ໄດ້.

- **<u>ຂ/ ປະເພນີ</u>**

ການນັບຖືຊຶ່ງກັນ ແລະ ກັນ ເປັນສິ່ງສຳຄັນຫລາຍທີ່ສຸດ ຢູ່ໃນສັງຄົມຄົນລາວ ບໍ່ໃຫ້ມີຄວາມປະມາດຕໍ່ປະເພນີ ໃຫ້ຄວາມເຄົາຣົບ ນັບຖື ບໍ່ໃຫ້ດູຖູກດູໝິ່ນ ຊຶ່ງກັນແລະກັນ ທາງດ້ານຄວາມເຊື່ອຖື ຮີດຄອງປະເພນີ, ດ້ານເພດ, ຊັ້ນ ວັນນະ ເປັນຕົ້ນຄື: ການເວົ້າຈາ, ການສຳພັດມື, ການໄຫ້ວ ແລະ ການຍ່າງຜ່ານຕໍ່ໜ້າ ຜູ້ອາວຸໂສ ຫລື ເຈົ້ານາຍຜູ້ໃຫ່ຍ ແຕ່ກໍເຫັນວ່າ ປະເພນີລາວ ບາງຢ່າງ ມັນຫລ້າສໄມໄປ ຈຶ່ງຄວນເລືອກໃຊ້ ເລືອກຖື. ປັຈຸບັນໂລກໄດ້ປ່ຽນແປງໄປ ສັງຄົມວັທະນະທັມ ກໍຕ້ອງມີການປ່ຽນແປງໄປຕາມໆກັນ ຈຶ່ງຄວນໃຫ້ມັນພໍດີພໍງາມ ເໝາະສົມ. ສິ່ງທີ່ຄວນ ລະເວັ້ນ ກໍຄື ການດື່ມຂອງມຶນເມົາ ຢູ່ໃນສາທາຣະນະ ແລະ ຢູ່ບ່ອນສນຸກສະນານ ບັນເທີງລື້ນເລີງ ເພາະສັງຄົມລັງກຽດ ບໍ່ທັນກັບການປ່ຽນແປງຂອງໂລກ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ດ້ານການສຶກສາ, ດ້ານຄວາມຈະເຣີນ.  ລາວເຮົາຕ້ອງປັບຕົວ ປ່ຽນໄປຕາມ ສຖານະການ ຂອງໂລກ ທີ່ເຫັນວ່າໂລກສ່ວນຫລາຍມັກ ແລະ ຢູ່ຮ່ວມກັນໄດ້ ບໍ່ຄວນຈະຖືໂຕເອງໂພດ ຖືສິ່ງທີ່ບໍ່ຈຳເປັນຕ້ອງຖື. ອີກຢ່າງນຶ່ງ ລາວເຮົາມີປະເພນີ ມັກຕ້ອນຮັບແຂກດ້ວຍຄວາມມ່ວນຊື່ນ ດຶງລູກຫລານໄປເຮຮາລຳວົງດື່ມເລົ້າເມົາຢາ ດ້ວຍຄວາມມວ່ນຊື່ນ ຈົນກາຍຂອບເຂດ. ເມື່ອເມົາແລ້ວ ບາງເທື່ອກໍພາໃຫ້ປະເພນີເຊື່ອມເສັຍ. "ມາຣະຍາຕດີ ບອກຕະກູນ"

○ **ຄ/ ພາສາ**

ຢູ່ໃນປະເທສລາວ ມີຫລາຍພາສາ. ພາສາລາວ ແມ່ນພາສາຊາຕ ແລະ ພາສາທາງການ. ມີຫລາຍຊົນຊາຕຊົນເຜົ່າ ແຕ່ລະເຜົ່າປາກພາສາຂອງຕົນເອງ. ຄວາມຫຍູ້ງຍາກຢູ່ພາຍໃນປະເທສ ກໍແມ່ນສ່ວນນຶ່ງທາງດ້ານພາສາ ເພາະຜູ້ບໍຣິຫາຣປະເທສ ບໍ່ໄດ້ພັທນາ ຂະຍາຍທາງດ້ານກາຣສຶກສາໃຫ້ທົ່ວເຖິງ. ຢູ່ບາງເຂຕ ປະຊາຊົນໄດ້ຄົ້ນຄ໊ວເອົາເອງ ຍ້ອນພາສາແຕກຕ່າງກັນ ຈຶ່ງພາໃຫ້ຫຍູ້ງຍາກໃນການນຳພາຍ້ອນ ບໍ່ເຂົ້າໃຈກັນບໍ່ຮູ້ພາສາ ກໍຖືວ່າບໍ່ສົນໃຈ ແລະບໍ່ປະຕິບັດຕາມຄຳສັ່ງ, ຕາມຄວາມຕ້ອງການ, ດັ່ງນີ້ພາໃຫ້ມີຄວາມຂັດແຍ້ງຕໍ່ກັນຫລື ຖືວ່າບໍ່ເບິ່ງແຍງ ຫລົ້ນພັຄ ຫລົ້ນພວກ ເກີດມີປອມດອ້ຍນ້ອຍໃຈ ພາໃຫ້ຖືກຕົວະຍົວະ ໄດ້ໄວ. ນອກຈາກນີ້ ພາສາຍັງພາໃຫ້ແປຄວາມເວົ້າໄປບໍ່ຄືກັນ. ບໍ່ເຂົ້າໃຈພາສາ ເດົາເອົາ ກໍມີ ຈຶ່ງພາໃຫ້ເກີດຄວາມເສັຍຫາຍໃຫ້ແກ່ຜູ້ອື່ນເວລາເດົາຜິດ. "ພາສາບອກຊາຕ, ການສຶກສາ ບອກຄວາມຈເຣີນ".

0 **ບໍ່ມີຄວາມຍຸຕິທັມ**

ບໍ່ມີມະນຸສທັມ, ບໍ່ມີກົດໝາຍ ອັນແນ່ນອນມາປົກຄອງ ເຖິງມີ ກໍບໍ່ໄດ້ໃຊ້ ແລະ ບໍ່ຮູ້ໃຊ້.  ຄວາມຍຸຕິທັມແມ່ນການສເມີພາບ ເທົ່າທຽມກັນ, ດັ່ງນີ້ ຈຶ່ງສ້າງຄວາມສາມັກຄີ ປອງດອງກັນໄດ້. ຢູ່ໃນປະເທສລາວຄວາມຍຸຕິທັມ ແມ່ນມີນ້ອຍທີ່ສຸດ ຍ້ອນຖານະຂອງຕະກູນ, ຄອບຄົວ, ຄວາມເປັນຢູ່, ຄວາມຮູ້ ບໍ່ເທົ່າທຽມກັນ ຈຶ່ງມີການໃຊ້ອຳນາຕ. ໃນເມື່ອບໍ່ມີຄວາມຍຸຕິທັມ, ບໍ່ຮູ້ກົດໝາຍ, ບໍປະຕິບັດຕາມຫລັກການ ທາງດ້ານກົດໝາຍ ແລະ ບໍ່ມີມະນຸສທັມກໍຕ້ອງມີບັນຫາເກີດຂຶ້ນ ເພາະ ມະນຸສບໍ່ມີສິດ ເປັນຕົວຂອງຕົນເອງ. ລັທທິຄອມມຸຍນິສຕ໌ ແມ່ນ ລັທທິ ບໍ່ເຫັນຄູນຄ່າ ຂອງມະນຸດ ດັ່ງນີ້ຈຶ່ງບໍ່ຄວນເຄົາຣົບນັບຖື ລັທທິ ຄອມມຸຍນິສຕ໌.

**4. ລັທທິ ໝາຍເຖິງຣະບອບການປົກຄອງຄື:**



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

-ຣະບອບເສຣີປະຊາທິປະໄຕ

-ຣະບອບສັງຄົມນິຍົມ (ຄອມມຸຍນິສຕ໌ )

-ຣະບອບເປັນກາງ

**ລັທທິ ການປົກຄອງແບບຣະບອບປະຊາທິປະໄຕ**ຈະຕ້ອງມີລັກຊນະ ດັ່ງນີ້ຄື:

- ✓ ກ- ອຳນາຕສູ່ງສຸດ ໃນການປົກຄອງ ແບບປະຊາທິປະໄຕ ຕ້ອງແມ່ນຂອງປະຊາຊົນ ກ່ອນ.
- ✓ ຂ- ຈັດໃຫ້ມີການເລືອກຕັ້ງ, ມີສິດການເລືອກຕັ້ງ ຖືກຕ້ອງຢ່າງເສຣີ, ການລົງຄະແນນສຽງໃນການເລືອກຕັ້ງ ຈະຕ້ອງໃຫ້ມີຄວາມເປັນທັມໃນການລົງສຽງ.
- ✓ ຄ- ເສຣີພາບຕ່າງໆຂອງປະຊາຊົນ ຕ້ອງໄດ້ຮັບຫລັກຄ້ຳປະກັນຢ່າງແນ່ນອນ ຈາກຣັຖທັມະນູນຂອງ ຣັຖສະພາແລະສານຂອງຊາຕ.
- ✓ ຈ- ການດຳເນີນງານຂອງ ຣັຖບາລ ຈະຕ້ອງກະທຳເພື່ອປະໂຍດຂອງສ່ວນລວມ ບໍ່ແມ່ນເພື່ອບຸກຄົນໃດບຸກຄົນນຶ່ງ ຫລືພັຄໃດພັຄນຶ່ງ.
- ✓ ສ- ເຖິງວ່າປະຊາຊົນຈະມອບອຳນາຕໃຫ້ຣັຖບາລ ທຳການແທນປະຊາຊົນ ກໍຍັງມີສ່ວນໃນການສແດງຄວາມເຫັນດີ ຫລືສເນີແນະ ຫລືໃຫ້ການອອກສຽງ ຄັດຄ້ານໄດ້ ກ່ຽວກັບນະໂຍບາຍໃນການບໍຣິຫາຣຂອງ ຣັຖບາລ.
- ✓ ຊ- ເມື່ອເກີດມີການຂັດແຍ້ງກັນໃນກໍຣະນີໃດໆ ອັນອາຈມີຜົລກະທົບກະເທືອນ, ປະຊາຊົນຈະຕ້ອງຍຶດຖືຫລັກການແກ້ໄຂ ຄວາມຂັດແຍ້ງໂດຽ ຖືສຽງສ່ວນຫລາຍ ເປັນຫລັກເກັນ.
- ✓ ຍ- ກ່ອນຣັຖບາລ ຈະເຂົ້າບໍຣິຫາຣປະເທສ ຈະຕ້ອງອອກຖແລງນະໂຍບາຍຂອງຕົນໃຫ້ປະຊາຊົນຊາບ ແລະຈະຕ້ອງປະຕິບັດຕາມນະໂຍບາຍທີ່ໄດ້ຖະແລງໄວ້ນັ້ນດ້ວຍ ຖ້າຣັຖບາລບໍ່ໄດ້ຮັບຄວາມໄວ້ວາງໃຈຈາກສະພາ ຣັຖບາລນັ້ນ ກໍຈະຕົກໄປ.
- ✓ ດ-ປະຊາຊົນຜູ້ມີສິດເລືອກຕັ້ງ ສະມາຊິກສະພາຜູ້ແທນຣາຊດອນ ຍ່ອມມີສິດອອກສຽງ ລົງປະຊາມັຕຕິໂດຽຖືກຕ້ອງ ໄດ້ສຽງສ່ວນຫລາຍເປັນຜູ້ແທນຣາຊດອນ ແລະຍ່ອມມີສິດອອກສຽງປະຊາມັຕຕິ ບໍ່ເຫັນດີນຳຮ່າງຣັຖທັມະນູນ, ຖ້າບໍ່ເຫັນດີ ກໍໃຫ້ຮ່າງຣັຖທັມະນູນນັ້ນ ຕົກໄປ.
- ✓ ຕ-ຈະຕ້ອງນັບຖື ຍອມຮັບຮູ້ວ່າ ຄຸນຄ່າຂອງຄວາມເປັນມະນຸດ ໂດຽຖືວ່າທຸກຄົນ ມີຄູນຄ່າຂອງຄວາມເປັນມະນຸດເທົ່າທຽມກັນ ບໍ່ມີການແຍກເຜົ່າພັນ, ຊັ້ນວັນນະ ຫລື ເພຊໃດໆທັງສິ້ນ.

**ລັທທິການປົກຄອງແບບສັງຄົມນິຍົມ (ຄອມມຸຍນິສຕ໌)**



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ມີຄວາມແຕກຕ່າງກັນກັບຣະບອບເສຣີປະຊາທິປະໄຕ. ຍ້ອນລັທທິ ຄອມມຸຍນິສຕ໌ ເປັນຣະບົບການເມືອງ ແລະເສຖກິຈ ຊຶ່ງມີພັຄການເມືອງພັຄດຽວ ຄູມອຳນາດແລະມີອິທິພົລຢູ່ໃນໂລກນີ້ນັບແຕ່ໃນປີ 1900-1990, ປະຊາຊົນສ່ວນໜຶ່ງຂອງໂລກ ໄດ້ເຫັນພ້ອມວ່າ ລັທທິຂອງຄອມມຸຍນິສຕ໌ ຍິ່ງໃຫ່ຍທີ່ສຸດແລະໄດ້ ຂົ່ມຂູ່ສັນຕິພາບຂອງໂລກ ຢ່າງສັ່ນສະເທືອນ. ຜູ້ທຳອິດໄດ້ນຳເອົາລັດທິຄອມມຸຍນິສຕ໌ໄປໃຊ້ ແມ່ນ (V.I. Lenin) ເຊື້ອຊາຕຣັຊເຊັຍ. ຜູ້ທີ່ຂຽນຫລັກກາຣຄອມມຸຍນິສຕ໌ ແມ່ນ (Karl Max) ເປັນຄົນຊາຕເຢຣະມັນ ເຄີຍເປັນນັກຂຽນຕອນສໄມປີ 1848. ລັທທິຄອມມຸຍນິສຕ໌ ບໍ່ມີຄວາມເຊື່ອຖືດ້ານສາສນາ, ດ້ວຍເຫຕນັ້ນ ສາສນາຈຶ່ງບໍ່ມີຢູ່ໃນປະເທສທີ່ປົກຄອງແບບລັດທິຄອມມຸຍນິສຕ໌. ລັຕທິຄອມມຸຍນິສຕ໌ ມີການຈຳກັດ ອິສຣະພາບຂອງປະຊາຊົນ ຢ່າງເຂັ່ງຄັດ ດັ່ງນັ້ນຈຶ່ງມີປະຊາຊົນຫລາຍຄົນໂຕນໜີ ອອກຈາກປະເທສ ຄອມມຸຍນິສຕ໌ ໄປສູ່ປະເທສ ທີ່ມີເສຣີພາບປະຊາທິປະໄຕ (ໂລກເສຣີ).

## 5. ຂາດການພັທນາ ການສຶກສາ

ເມືອງລາວໄດ້ຟື້ນຟູການສຶກສາຂອງຕົນພຽງເລັກນ້ອຍ ພາຍຫລັງສົງຄາມໂລກຄັ້ງທີ່ສອງ, ຈົນກະທັ້ງສົງຄາມວຽດນາມເກີດ. ໂດຽສະເພາະຢູ່ໃນເຂຕປອດໄພຍ໌, ສະຫະຣັຖໄດ້ໃຫ້ກາຣຊ່ວຍເຫລືອ ດ້ານກາຣ ສຶກສາ ດີພໍສົມຄວນ, ຍ້ອນສົງຄາມໄດ້ຄຸກຄາມເມືອງລາວ ແຕ່ເໜືອຕລອດໃຕ້, ຣັຖບາລລາວຈຶ່ງບໍ່ມີຄວາມສາມາດປັບປຸງດ້ານການສຶກສາ. ປະຊາຊົນລາວສ່ວນຫລາຍ ແມ່ນບໍ່ໄດ້ຮັບການສຶກສາດີ ບໍ່ຮູ້ອ່ານ ບໍ່ຮູ້ຂຽນ ແມ້ແຕ່ ພາສາຂອງຕົນເອງ. ດັ່ງນີ້ ການວິເຄາະສະພາບການຂອງບ້ານເມືອງ ວ່າຈະດີຫລືຮ້າຍແມ່ນເຮັດບໍ່ເປັນ, ບໍ່ເຂົ້າໃຈ. ມີຄົນຜູ້ໃດເວົ້າດີ ຫົວມ່ວນ ພວກເຂົາກໍແລ່ນນຳຫລັງຜູ້ນັ້ນ.

ປະຊາຊົນລາວຫລາຍຄົນ ໄດ້ຖືກຫລອກແຕ່ງຕັ້ງຈາກຄອມມຸຍນິສຕ໌ ໃຫ້ເປັນເຈົ້າເປັນນາຍ ແຕ່ມີຂໍ້ແມ້ວ່າ ຕ້ອງນຳພາພີ່ນ້ອງຂອງຕົນເອງ ເຂົ້າຕໍ່ສູ້ຮ່ວມກັບຄອມມຸຍນິສຕ໌. ຜູ້ໄດ້ຮັບການແຕ່ງຕັ້ງນັ້ນ ກໍມີຄວາມດີອົກດີໃຈວ່າຕົນໄດ້ເປັນເຈົ້າເປັນນາຍແລ້ວ ກໍໄດ້ຊັກຊວນເອົາຍາຕພີ່ນ້ອງ ແລະຄອບຄົວ ໄປຕໍ່ສູ້ຊ່ວຍຄອມມຸຍນິສຕ໌ ໂດຽບໍ່ໄດ້ສຳຣວດເບິ່ງຄວາມຮູ້ ຄວາມສາມາດ ຂອງຕົນເອງວ່າ ຢູ່ໃນຣະດັບໃດ? "ສຸພາສິດລາວ ຈຶ່ງກ່າວວ່າ "ລາວບ້າຍົດ." ຍົດຂັ້ນ ໄດ້ເຮັດໃຫ້ຄົນລາວຜູ້ທີ່ ດອ້ຍການສຶກສາ ເກີດຕື່ນ ແລະເມົາອຳນາຕ ຈຶ່ງໄດ້ພາກັນໄປຕາຍໃນສນາມລົບ ຢ່າງນັບບໍ່ຖ້ວນ ໄດ້ເຮັດໃຫ້ປະເທສຊາຕລົ້ມຈົມ, ນີ້ຄືບົດຮຽນຂອງຄົນລາວຕັ້ງແຕ່ ຫລາຍສໄມຜ່ານມາ.

## 6. ຂາດການພັທນາ ຖນົນຫົນທາງ ແລະ ການຕິດຕໍ່


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເມືອງລາວເປັນປະເທສຫລ້າຫລັງ ຂາດການພັທນາ ປັບປູງທຸກຢ່າງ, ເປັນປະເທສທີ່ມີພູເຂົາສູງ ຈະໄປມາ ຫາສູ່ກັນແມ່ນຍາກ ແລະໃຊ້ເວລາຫລາຍທີ່ສຸດ ມີແຕ່ຍ່າງ ຫລື ບາງເທື່ອ ຂີ່ສັຕ ຄື: ມ້າ ແລະຊ້າງ ເທົ່ານັ້ນ. ຫລັງຈາກຝຣັ່ງມາປົກຄອງລາວ ຝຣັ່ງໄດ້ພະຍາຍາມສ້າງຖນົນ ຫົນທາງຫລາຍສາຍ ຕາມພາກເໜືອຂອງ ລາວ ເຊັ່ນຖນົນເລຂ 1 ຫາເລຂທີ່ 7ແລະຖນົນເລຂທີ່ 13 ລ່ອງແຕ່ຫລວງພະບາງຈົນເຖິງພາຄໃຕ້. ພາຄ ກາງ ຫາພາຄໃຕ້ ກໍມີຫລາຍຖນົນເຊັ່ນ: ຖນົນເລຂທີ່ 8 ຈົນເຖິງເລຂທີ່ 12. ຖນົນຣົຖທີ່ແລ່ນໄດ້ ກໍມີແຕ່ຢູ່ ແຖວທີ່ຮາບພຽງ ໂດຽສະເພາະແມ່ນຢູ່ໃນເມືອງສ່ວນຫລາຍ ກໍເປັນຖນົນທີ່ມີຂີ້ຝຸ່ນ ແລ່ນໄວບໍ່ໄດ້ ບາງ ບ່ອນ ກໍເປັນຂູ່ມເປັນໂບນ ຍາມຝົນແມ່ນລຳບາກທີ່ສຸດ. ການຫາຣົຖຂີ່ກໍຍາກມີແຕ່ເຈົ້ານາຍຫລືຕ່າງດ້າວ ເທົ່ານັ້ນຈຶ່ງໄດ້ຂີ່ ຣົຖ. ນ້ຳມັນຣົຖ ກໍຫາຍາກ ແລະ ແພງ ຍ້ອນເງິນກີບ ບໍ່ມີຣາຄາ ເພາະລາວບໍ່ມີເສຖາ ກິດ ອັນແນ່ນອນຄ້ຳປະກັນທະນາຄານຂອງຊາຕ.

ສົງຄາມຕ້ານຝຣັ່ງເສສ ຈາກຝ່າຍກູ້ຊາຕຂອງສະຫະພັນອິນດູຈີນ ໄດ້ເຮັດໃຫ້ຖນົນເພພັງ ແລະບໍ່ມີຄວາມ ປອດໄພຍ ພາໃຫ້ເສັ້ນທາງຫລາຍສາຍໃນພາກເໜືອ, ພາກກາງແລະພາກໃຕ້ ໃຊ້ການບໍ່ໄດ້ ເໝືອນບໍ່ມີ ຖນົນຫົນທາງມາໄດ້ດົນນານ. ສໄມສະຫາຣັຖ ໄປຕໍ່ສູ້ຄອມມຸຍນິສຕ໌ຢູ່ໃນອິນດູຈີນ ລະຫວ່າງ 1960 ຫາປີ 1975 ກໍບໍ່ໄດ້ໃຊ້ຖນົນຫົນທາງ ສ່ວນຫລາຍກໍ່ມີແຕ່ໃຊ້ເຄື່ອງບິນໃນການຂົນສິ່ງ ເພາະ ຖນົນບໍ່ປອດໄພຍ ນາຍທະຫາຣລາວຫລາຍຄົນຈຶ່ງບໍ່ເຫັນຄວາມສຳຄັນຂອງຖນົນຫົນທາງ ທີ່ຝ່າຍຄອມມຸຍນິສຕ໌ໃຊ້ເປັນທາງ ລັບໆເຂົ້າໄປໂຈມຕີຝ່າຍມິຕໂດຍບໍ່ຮູ້ເນື່ອ. ຖນົນຫົນທາງແມ່ນທາງເຂົ້າ ທາງອອກອັນສຳຄັນຂອງການຕໍ່ ສູ້ສົງຄາມ ດັ່ງນີ້ ການວາງແຜນເຂົ້າຕໍ່ສູ້ ຫລືປ້ອງກັນພື້ນທີ່ ກໍຕ້ອງຮູ້ຖນົນຫົນທາງຢ່າງດີ ຈຶ່ງໃຊ້ໄດ້, ການ ເຄື່ອນເຂົ້າໄປໂຈມຕີສັດຕຣູ ເຮົາຕ້ອງຮູ້ໜ້າດິນຢ່າງຄັກແນ່ ເພື່ອການວາງແຜນ ເຄື່ອນເຂົ້າໄປຈູ່ໂຈມ ສັດຕຣູ. ຮູ້ພື້ນທີ່ດີເທົ່ານັ້ນ ຈຶ່ງເຂົ້າໃຈເອົາໄຊຍຊນະກັບສັດຕຣູ.

***ປະເທສທີ່ຂາດການປັບປູງດັ່ງຕໍ່ໄປນີ້ແມ່ນປະເທສ ທີ່ບໍ່ມີຄວາມກ້າວໜ້າ***:

ຂາດການປັບປູງຄວາມເຊື່ອຖື; ຂາດການປັບປູງລະບອບການປົກຄອງ; ຂາດການປັບປູງດ້ານການສຶກ ສາ; ດ້ານການຕິດຕໍ່ໄປມາຫາສູ່ກັນ; ການຄົ້ນຄ້ວດ້ານການເມືອງ ແລະການປັບປູງດ້ານເສຖກິດ. ແມ່ນ ປະເທສນັ້ນ ຂາດຄວາມຈະເຣີນ ບໍ່ເບິ່ງເຫັນຄວາມກ້າວໜ້າຂອງຊາຕ ແລະບໍ່ເປັນກ້ອນເປັນໜ່ວຍ ເຕົ້າ ໂຮມກັນຍາກ ແນວຄິດກໍຕ່ຳ ມີແຕ່ຄົນເຫັນແກ່ຕົວ ບໍ່ເຫັນແກ່ ສ່ວນຮວມ ຂອງຊາຕ ບ້ານເມືອງ ເໜືອໄປ ກວ່ານີ້ ເມືອງລາວເຮົາເປັນປະເທສທີ່ຫລ້າຫລັງທີ່ສຸດໃນໂລກ ພ້ອມທັງເປັນປະເທສ ທີ່ມີສົງຄາມຍາວ ນານ ມາໄດ້ຫລາຍສໄມ ຈຶ່ງໄດ້ພາໃຫ້ຊາຕລາວ ແລະ ຜືນແຜ່ນດິນລາວ ປ່ຽນແປງໄປເລື້ອຍໆ. ຖ້າປ່ຽນ ແປງໄປໃນທາງທີ່ດີນັ້ນ ລາວທຸກຄົນຍ່ອມມີຄວາມດີໃຈ ສັນລະເສີນ ແຕ່ນີ້ ມັນກັບກາຍເປັນສິ່ງ ທີ່ຕົງກັນ ຂ້າມ ຍິ່ງປ່ຽນແປງ ຍິ່ງຕົກທຸກໄດ້ຍາກຍິ່ງນ້ອຍລົງ ຮອມເຂົ້າ ຍິ່ງເປັນຫົວເມືອງຂຶ້ນ ຍິ່ງຕິດໜີ້ ໄຊ້ບໍ່ໝົດ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເພາະໄປຂໍທານນໍາຊາດອື່ນມາຕໍ່ສູ້ ເພື່ອຜົລປໂຍດຂອງຜູ້ນໍາ ທີ່ເຫັນແກ່ຕົວ ຫລື ພັກພວກ ທີ່ບໍ່ເຫັນປະໂຍດສ່ວນຮວມຂອງການປັບປູງ ແລະ ການພັທນາຊາຕ.

ການຄົ້ນຄົ້ວ ການຊຸກຍູ້ປະຊາຊົນໃນຊາຕ ແມ່ນສິ່ງສໍາຄັນທີ່ສຸດຂອງຊາຕ. ດັ່ງນີ້ຈື່ງຄວນມີຜູ້ນໍາ ທີ່ເປັນບຸກຄົນທີ່ມີຄວາມຮູ້, ຄວາມສໍານານ ແລະ ມີສາຍຕາເຫັນກວ້າງ ເຫັນໄກໃນຄວາມຕ້ອງການຂອງຊາຕບ້ານເມືອງ ຮູ້ຈັກສ້າງຄວາມສິນໃຈ ແລະ ການຮ່ວມໄມ້ຮ່ວມມື ຂອງປະຊາຊົນໃນຊາຕ ໃນການອອກຄວາມຄິດ ຄວາມເຫັນ, ໃນການໃຫ້ກ້ອນເງິນທືນ ແລະ ການໃຫ້ກໍາລັງແຮງງານສນັບສນຸນ. ມີຜູ້ນໍາທີ່ດີ ແຕ່ຂາດປະ ຊາຊົນຜູ້ມີຄວາມຮູ້, ສນັບສນຸນ, ສິນໃຈ ກໍໄປບໍ່ລອດ. ມີປະຊາຊົນທີ່ດີແຕ່ ບໍ່ມີຜູ້ນໍາ ທີ່ດີ ກໍໄປບໍ່ລອດ. ຄອບຄົວທີ່ມີຄວາມກ້າວໜ້າດີ ແມ່ນຄອບຄົວ ທີ່ມີພໍ່ແມ່ ເປັນແບບຢ່າງ ທີ່ດີ ໃຫ້ແກ່ລູກເຕົ້າ. ຊາຕ ໃດທີ່ມີຜູ້ນໍາທີ່ມີລະບຽບວິໄນດີ ຊາຕນັ້ນຈະມີຫວັງ ຢູ່ໃນລະບຽບວິໄນ ອັນຮຽບຮ້ອຍ ແລະ ມີຄວາມຈິບງາມ. ປະເທສທີ່ມີປະຊາຊົນບໍ່ເປັນລະບຽບ, ບໍ່ນັບຖືກົດໝາຍ, ປະຕິບັດຕາມໃຈຂອງຕົນ ປະເທສນັ້ນຈະ ຂາດຄວາມປອດໄພ້ຍ, ບໍ່ມີມາລະຍາດດີ, ເຂົ້າສັງຄົມໄດ້ຍາກ ບໍ່ມີປະເທສອື່ນຢາກຊ່ວຍ ຢາກພົວພັນນໍາໃນດ້ານເສຖກິດ ແລະ ດ້ານການຮ່ວມໄມ້ຮ່ວມມືຕ່າງໆ.

ເໜືອໄປກວ່ານີ້ ລາວຍັງເປັນປະເທສນື່ງທີ່ຂາດທາງອອກສູ່ທະເລ ເປັນປະເທສນ້ອຍໆ ຢູ່ໃນອ້ອມຮອບຂອງຫລາຍປະເທສ ທີ່ໃຫ່ຍກວ່າ ແລະ ມີປະ ຊາຊົນ ຫລາຍກວ່າ. ເປັນປະເທສໜື່ງທີ່ເຕັມໄປດ້ວຍພູເຂົາສູງ ຫລາຍໜ່ວຍຕາມພາກເໜືອ ພາກກາງ, ພາກໃຕ້ ແຕ່ບໍ່ມີການປັບປູງຫລືໃຊ້ເປັນປະໂຍດ. ພູແລະ ແມ່ນໍ້າເຫລົ່ານີ້ມີຄື: ພູຜາທີ, ພູເລີຍ, ພູເບັ້ຍ, ພູປາກຊອງ. ເປັນປະເທສທີ່ມີແມ່ນໍ້າຜ່ານຫລາຍແມ່ນໍ້າ ຢ່າງງົດງາມຄື: ນໍ້າຂອງໄຫລຜ່ານແຕ່ເໜືອຕລອດໃຕ້ ຄື:

-ພາກເໜືອມີ: ແມ່ນໍ້າອູ, ນໍ້າເຊືອງ, ນໍ້າຄານ, ນໍ້າລິກ ແລະ ນໍ້າງື່ມ.
-ພາກກາງ ມີ: ແມ່ນໍ້າຊັນ, ນໍ້າກະດິງ ແລະນໍ້າເທີນ.
-ພາກໃຕ້ມີ: ແມ່ນໍ້າ ເຊບັ້ງໄຟ, ນໍ້າເຊຈໍາພອນ, ນໍ້າເຊບັ້ງຫຽງ, ນໍ້າເຊໂດນ ແລະ ນໍ້າເຊກອງ
-ນອກຈາກນີ້ ພາຄໃຕ້ຍັງມີ ຄອນພະເພັງ (ຄອນຫລີ່ຜີ) ທີ່ງົດງາມ ແລະ ໜ້າຢ້ຽມຢາມທີ່ສຸດ.

ເມືອງລາວເປັນສະຖານທີ່ ພັກພ່ອນຢ່ອນອາລົມດີທີ່ສຸດຢູ່ພາຄເໜືອ ແລະພາຄໃຕ້ ແຖວພູສູງປາກຊ່ອງອາກາສ ກໍສົດໄສດີ ແລະ ມີອາກາສປ່ຽນໄປມາສອງລະດູ ຄື: ລະດູແລ້ງ (ໄຟໄມ້ປ່າ )ແລະລະດູຝົນ (ລະດູໜາວແມ່ນບໍ່ມີ ກໍວ່າໄດ້ ເວັ້ນຈາກທາງເໜືອ ແຕ່ເໜືອຊຽງຂວາຂື້ນໄປຫາແຂວງຫົວພັນ). ລະດູແລ້ງເລີ່ມແຕ່ກາງເດືອນພຶສຈິກາ (November) ໄປຈົນເຖິງກາງເດືອນມິຖຸນາ (June) ຈື່ງເລີ່ມຝົນຕົກໄປຈົນເຖິງທ້າຍເດືອນຕຸລາ (October). ອາກາສທີ່ງົດງາມແລະໜ້າຊົມຊື່ນທີ່ສຸດແມ່ນ ເລີ້ມແຕ່ເດືອນພຶສຈິກາຫາເດືອນມີນາ (November to March) ແມ່ນຍາມດອກໄມ້, ຍາມອາກາສເຢັນ ສົດໄສດີທີ່ສຸດ ມີການມ່ວນຊື່ນຫລາຍຢ່າງ ຢູ່ ໃນບູນຕ່າງໆຂອງລາວຄື: ບູນປີໃໝ່ນາໆຊາຕ ແລະເຜົ່າຕ່າງໆ. ຍາມໜາວນີ້ບໍ່


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຄອ່ຍມີ ໝາກໄມ້ຫລາຍ ແຕ່ກໍມີໝາກກ້ຽງ ໝາກຮິດ ໝາກພຸກ ໝາກຄາຍ. ລະດູທີ່ມີໝາກໄມ້ຫລາຍ ຊະນິດທີ່ສົມບູນ ແມ່ນຫລັງຈາກລະດູຝົນເບົາບາງລົງ. ຍາມລະດູຮ້ອນ ຊາວເອເຊັຍກໍມີການມ່ວນຊື່ນ ຫລາຍຢ່າງ ທັງກາງວັນ ແລະ ກາງຄືນ. ຍາມນີ້ ຫລາຍປະເທສໃນເອເຊັຍ ນາງສາວນຸ່ງເຄື່ອງເປັນທີ່ປະ ທັບໃຈສຸດ ເພາະການ ໂຊຊາໂຊແອວ ແລະໂຊເອິກ ເປັນທີ່ໜ້າຮັກ, ໜ້າຊົມເຊີຍຢ່າງຍິ່ງ.

ຢູ່ໃນປະເທສລາວ ຄົນລາວມີປະເພນີ ອັນຈົບງາມອົບອູ່ນ ຖ້າເຂົ້າໃຈພາສາ ແມ່ນໄປຮອດໃສກໍຕາມ ມີທີ່ ພັກເຊົາ ມີການຕອ້ນຮັບເປັນຢ່າງດີ ບໍ່ຈຳເປັນຕ້ອງຊອກໂຮງແຮມ (Hotel) ສະເພາະບ່ອນທີ່ຢູ່ຫ່າງໄກ ເມືອງ. ສຳຫລັບດ້ານອານາໄມນັ້ນ ຢູ່ໃນປະເທສລາວ ຍັງບໍ່ດີເທົ່າໃດ ໂດຽສະເພາະ ແມ່ນຍູງກັດ, ນ້ຳດື່ມ, ແມງວັນ, ແລະອາຫາຣ. ບ່ອນພັກເຊົາ ຕາມບ້ານ ທີ່ຢູ່ຫ່າງໄກຕົວເມືອງ ແມ່ນຍັງບໍ່ທັນສໄມພຽງພໍ ສຳລັບ ການຕ້ອນຮັບແຂກທີ່ມາຈາກຕ່າງປະເທສ.

ປະເທສທີ່ມີການສອນສາສນາດີ, ມີລັທທິນຳພາດີ ຍ່ອມເປັນປະເທສທີ່ຈະເຣີນ ແມ້ຈະເປັນປະເທສ ນ້ອຍ ກໍຕາມ ຕ້ອງມີຄວາມກ້າວໜ້າ ແລະ ໝັ້ນຄົງ ດັ່ງປະເທສ ຊຸຍເຊີແລນ (Switzerland), ປະເທສ ຍີປຸ່ນ (Japan), ປະເທສເກົາລີ (South-Korea), ແລະ ປະເທສເຢຣະມັນ (Germany). ເຖິງເຂົາ ຈະມີເສີກ ເສືອ ແຕ່ກໍພາໃຫ້ເຂົາກ້າວໜ້າໄປໃນຂັ້ນທີ່ມີການປ່ຽນແປງໄປແບບໃໝ່. ປະເທສລາວ ເປັນປະ ເທສທີ່ ງາມ ມີສັບໃນດິນສິນໃນນ້ຳຫລາຍຢ່າງ ແຕ່ລາວມອງບໍ່ເຫັນ ມີແຕ່ເຫັນວ່າເປັນປະເທສທີ່ຫ່າງ ໄກສຸດ ຂອບຟ້າ ບໍມີຄວາມສຳຄັນ ຈື່ງບໍ່ສົນໃຈພັທນາ ຈົນກວ່າເກີດສົງຄາມ ທີ່ສະຫະຣັຖເຫັນວ່າເປັນຈຸດ ສຳຄັນ ທີ່ສຸດ ຕ້ອງໃຫ້ບິດຮຽນແກ່ສັດຕຣູ ຜູ້ຢາກຂຍາຍອິຕິພົນ ບາດແລ້ວເຮັດໃຫ້ປະຊາຊົນລາວ ເສັຍ ຫາຍໜັກ ທີ່ສຸດ ຢ່າງບໍ່ເຄີຍມີໃນປວັດສາຕ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 18.

# ຊີວິດອົພຍົບຕົກບ້ານຕົກເມືອງ

ໃນວັນທີ່ 10 ເດືອນພຶດສະພາ (May) 1975 ສະຖານະການໃນພາຄ 2 ແລະ ທີ່ວພະຣາຊ ອານາຈັກ ລາວ ໄດ້ປັ່ນປ່ວນຢ່າງໜ້າຢ້ານກົວທີ່ສຸດ ແລະ ບໍ່ເຄີຍມີມາແຕ່ກ່ອນ ເພາະສະຫະຣັຖໄດ້ຖິ້ມ ຝ່າຍວຽງ ຈັນທນ໌ ຢ່າງສິ້ນເຊີງ ບໍ່ມີທີ່ເພິ່ງພາອາໄສ໌ງ ການຊ່ວຍເຫລືອດ້ານກຳລັງທະຫາຣ ເພື່ອຕ້ານກັບ ຝ່າຍຄອມ ມຸຍນິສຕ໌ລາວແດງ ທີ່ມີວຽດນາມເໜືອເປັນຜູ້ໜູ່ນຫລັງຝ່າຍດຽວຢ່າງແຂງແຮງ ດ້ວຍກຳລັງ ແລະ ອາວຸທ ທີ່ໄດ້ມາຈາກຣັຊເຊັຍ. ຜູ້ນຳພາຄສອງຈຶ່ງມີການຕັດສິນໃຈອອກຈາກ ພາຄ 2 ເພື່ອໃຫ້ປະຊາຊົນລອດພົ້ນ ຈາກ ການທາລຸນຂອງຄອມມຸຍນິສຕ໌ ລາວແດງ ແລະ ວຽດນາມເໜືອ ແຕ່ກໍມອງ ບໍ່ເຫັນຄວາມຫວັງອັນ ໃດ ໃນອານາຄົຕຂ້າງໜ້າ ທຸກຢ່າງແມ່ນມືດມົວໄປໝົດ. ເໜືອໄປກວ່ານີ້ ແມ່ນແຕ່ຜູ້ນຳສ່ວນຫລາຍໄດ້ ມີໂອກາສໂຕນໜີ ໄປປະເທສໄທ໌ຍ ປະລູກນ້ອງ, ລູກຫລານ, ຄອບຄົວຍາຕຕິພີ່ນ້ອງ ກຣົມ ກອງໄວ້ເບື້ອງ ຫລັງ ໂດຽບໍ່ມີໂອກາສໄດ້ຕຽມໜີ ຫລື ຮູ້ເຫຕການ ມາກ່ອນ.

ຍ້ອນສຖານະການປັ່ນປ່ວນເຖິງຂັ້ນນີ້ ສະຫາຣັຖຈຳເປັນຕ້ອງໄດ້ເອົາເຄື່ອງບິນ C130, C 46 ແລະ C47 ໄປຂົນເອົາຫລາຍຄອບຄົວທີ່ຢູ່ລ່ອງແຈ້ງ ມູ້ງໜ້າໄປລົງຢູ່ສູນຝຶກນ້ຳພອງ, ຈັງວັດຂອນແກ່ນ ຣາຊອານາ ຈັກໄທ໌ຍ. ແຕ່ກໍບໍ່ໄດ້ຂົນໝົດ ເພາະຫລາຍຄົນບໍ່ຮູ້ແລະບໍ່ໄດ້ຕຽມ. ນອກນັ້ນ ກໍຢູ່ຫ່າງຈາກເດີນຍົນລ່ອງ ແຈ້ງ ຈຶ່ງໄດ້ຄ້າງຢູ່ໃນປະເທສ ຍ້ອນເຂົ້າມາບໍ່ທັນ. ເລີ່ມຂົນແມ່ນໃນວັນທີ່ 11ເດືອນ ພຶດສະພາ (May) ຈົນເຖິງວັນທີ່ 14 ພຶດສພາ (May) 1975. ຕອນເຊົ້າ ປະມານສິບເອດໂມງ ແມ່ນຖ້ຽວສຸດທ້າຍ. ການຂົນ ສົ່ງທາງອາກາສໄດ້ຢຸດຕິລົງ ເພາະສັດຕຣູໄດ້ເຂົ້າມາ ປິດລອ້ມລ່ອງແຈ້ງໄວ້ໝົດ ໄດ້ມີການຍິງປືນ ເຮັດໃຫ້ ນັກບິນ ໄດ້ເຫັນຄວາມບໍ່ປອດໄພ໌ຍ ຈຶ່ງໄດ້ຮອ້ງໃຫ້ ທ່ານ ເຢຣີ ແລະ ນາຍພົນ ວ່າງປາວ ວ່າ: ບໍ່ປອດໄພ໌ຍ ຈະບໍ່ກັບມາອີກ. ທ່ານນາຍພົນ ວ່າງປາວ ແລະ ທ່ານ ເຢຣີ ຈຶ່ງຕັດສິນໃຈອອກຈາກລອ່ງແຈ້ງເປັນຜູ້ນຳທີ່ ເຫັນໃຈປະຊາຊົນໄດ້ສ່ຽງເບິ່ງປະຊາຊົນຈົນໝົດຄວາມສາມາດ. ເມື່ອໄດ້ຢຸດ ການຂົນສົ່ງ ທາງອາກາສ ແລ້ວ ກໍມີປະຊາຊົນ, ທະຫາຣ ແລະ ຄອບຄົວຫລາຍພັນຄົນ ທີ່ຢູ່ແຖວອອ້ມແອ້ມ ລອ່ງແຈ້ງ ພາ ກັນເດີນ ທາງເຂົ້າສູ່ວຽງຈັນທນ໌ ດ້ວຍທາງຣົຖຫລື ຍ່າງຜ່ານປ່າດົງ ເພື່ອຫາທາງຂ້າມໄປປະເທສ ໄທ໌ຍໄປຕິດຕາມ ຜູ້ນຳ ແລະ ພໍ່ແມ່ຂອງຕົນທີ່ໄດ້ຂຶ້ນເຄື່ອງບິນໜີໄປກ່ອນ.

ທ່ານນາຍພົນ ວ່າງປາວ ແລະ ທ່ານເຢຣີ (Jerry Daniel) ໄດ້ໄປຂຶ້ນເຄື່ອງບິນຢູເຊດ ຊອບເປີ ຢູ່ເທິງພູ ພຣະຣາຊວັງ ບິນອອກ ຫລັງຈາກທ່ຽວບິນຂອງ C130ທ່ຽວສຸດທ້າຍ ໄປລົງເມືອງຈ້າ LS113 ແລ້ວຂຶ້ນ ເຄື່ອງບິນ ປອສ ເຕີ (Porter) ຕໍ່ໄປລົງ ນ້ຳພົງ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ທ້າຍເດືອນພຶດສະພາ (May) 1975 ຝ່າຍຄອມມຸຍນິສຕ໌ ໄດ້ປິດຖນົນຈາກວຽງຈັນຫນ໌ຫາລ່ອງແຈ້ງ ແລະ ຖນົນອື່ນອີກຫລາຍສາຍ ແລະ ໄດ້ຕັ້ງໜ່ວຍກວດກາ ປ້ອງ ກັນບໍ່ໃຫ້ປະຊາຊົນເຄື່ອນໄປມາໄດ້. ຍັງມີປະຊາຊົນເຜົ່າມົ້ງຈຳນວນໜຶ່ງ ໄດ້ເດີນທາງເຂົ້າໄປໃນນະຄອນວຽງຈັນຫນ໌ ແຕ່ ພໍໄປເຖິງຂົວນໍ້າຫລິກ ກຳລັງຍ່າງເຂົ້າກາງຂົວເທົ່ານັ້ນ ຝ່າຍຄອມມຸຍນິສຕ໌ລາວແດງກໍໄດ້ສາກ ກະສູນລູກປືນໃສ່ ພາໃຫ້ມີຄົນຕາຍຫລາຍຄົນ ແລະ ບາດເຈັບຫລາຍຄົນ ຕາມຮູບຢູ່ຂ້າງລ່າງນີ້.



*<u>ຮູບທີ່ 186</u>. ປະຊາຊົນເຜົ່າມົ້ງທີ່ຖືກຂ້າຕາຍຢູ່ຂົວນໍ້າຫລິກໃນເດືອນ ພຶດສພາ 1975. ປະມານ 50 ກ່ວາຄົນ ແມ່ນ ທ່ານ ຕຶງວົ້ວມົວ ຜູ້ ເຮັດວຽກໃຫ້ຢູເສດ ໄດ້ມາຂົນສົບໄປຝັ່ງຢູ່ນາຊູ. ທ່ານຕຶງວົ້ວມົວ ໄດ້ມາເສັຍຊີວິດຢູ່ South Carolina ໃນວັນທີ່ 14 ເດືອນມີນາ ປີ 2010.*

ປະຊາຊົນຕ້ອງຖອຍກັບໄປບ້ານຊອ້ນນາຊູ ເພື່ອຕຽມຊອກທາງໃໝ່ ຍ່າງຜ່ານປ່າດົງ ໄປຍັງ ປະເທສໄທ໌ຍ ເຖິງລາວແດງໄດ້ປ້ອງກັນ ໄດ້ຂ້າຖິ້ມ ແລະ ໄດ້ເຮັດທຸກຢ່າງ ເພື່ອຢັບຢັ້ງການໂຕນໜີຂອງປະຊາຊົນເຜົ່າລາວ ເຜົ່າມົ້ງ ແຕ່ ກໍບໍ່ໄດ້ຜົລ. ປະຊາຊົນໄດ້ຫລັ່ງໄຫລໄປສູ່ປະເທສໄທ໌ຍຢ່າງບໍ່ຂາດສາຍ ທ້າຍເດືອນພຶດສະພາ (May ) 1975 ເທົ່ານັ້ນ ປະຊາຊົນລາວ ຝ່າຍຂວາໄດ້ຫລັ່ງໄຫລໄປເຕັມ ຊາຍແດນ ຂອງຣາຊອານາຈັກ ໄທ໌ຍ ໄດ້ເຮັດໃຫ້ສຖານະການ ຕຶງຄຽດໃຫ້ແກ່ຣັຖບານໄທ໌ຍ ແລະ ລາວຄອມມຸຍນິສຕ໌. ຈຶ່ງເຮັດໃຫ້ຣັຖບານຣາຊອານາຈັກໄທ໌ຍ ແລະ ລາວຄອມມຸຍນິສຕ໌ ຕ້ອງຕັດສິນໃຈປິດຊາຍແດນລາວ-ໄທ໌ຍ ພ້ອມກັນນັ້ນ ກໍໄດ້ ສົ່ງນາຍທະຫານ ຂັ້ນສູງ ຫລື ຜູ້ນຳ ຂັ້ນສູງຝ່າຍວຽງຈັນຫ໌ນ ທີ່ໄດ້ໄປອາໄສ ຢູ່ປະເທສໄທ໌ຍ ໃຫ້ອອກໄປສູ່ປະເທສທີ່ສາມ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 187</u>. ຊາວລາວ ພາຄ 2 ກຳລັງ ຍາດກັນຂຶ້ນ ຍົນຊີ (C130) ທີ່ສະຫະຣັຖ ຈັດມາຕອ້ນໃນວັນທີ່ 11 ຫາ ວັນທີ່ 14 ເດືອນພຶດ ສະພາ (May) ປີ 1975. ຂຶ້ນໄດ້ແຕ່ພຽງ ຜູ້ທີ່ຢູ່ໃນລ່ອງແຈ້ງເທົ່ານັ້ນ.*



*<u>ຮູບທີ່ 188</u>. ຖ້ຽວບິນ C130 ຖ້ຽວສຸດທ້າຍບິນຂຶ້ນໃນເວລາ 11 ໂມງຂອງວັນທີ່ 14 ພຶດສະພາ 1975, ໝູ່ງໜ້າໄປລົງນໍ້າພອງ ຈັງວັດຄອນແກ່ນ ຣາຊອານາຈັກໄທ໌ຍ ພູ ທີ່ຢູ່ຕໍ່ໜ້າແມ່ນພູ ພຣະຣາຊວັງ "ບ່ອນພັກເຊົາຂອງເຈົ້າຊີວິດລາວ."*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 189</u>.  ຍົນຊີ C46 ຂອງສະຫະຣັຖມາຂົນຊາວອົພະຍົບລ່ອງແຈ້ງ 1975. ຂອບໃຈນຳທ່ານ ຣໍເຢີວາເຍີທີ່ເກັບຮູບພາບນີ້ໄວ້.*

ເຖິງຜູ້ນຳຂອງລາວຝ່າຍຂວາ ໄດ້ອອກໄປຈາກປະເທສໄທ໌ຍ ແລ້ວກໍຕາມ ການໂຕນໜີຂອງປະຊາຊົນ ລາວກໍບໍ່ໄດ້ຢຸດຕິແມ້ແຕ່ນ້ອຍ. ຣັຖບາລຣາຊອານາຈັກໄທ໌ຍ ຈຶ່ງໄດ້ຈັດສະຖານທີ່ ເພື່ອຕອ້ນຮັບຊາວ ອົພະຍົບ ທີ່ໜີໄປຈາກລາວ, ຂເມນ ແລະ ວຽດນາມໃຕ້ ຢູ່ຫລາຍແຫ່ງ ຄື: ສູນອົພະຍົບ ໜອງໄຄ, ຈັງວັດ ນານ; ສູນວິໄນ, ສູນພະນິມ, ສູນນາໂພ.  ຫລັງຈາກໄດ້ປິດສູນໜອງໄຄ ເພາະມີເຫຕໄຟໄມ້ແລະ ມີການ ຄາຕກັມຫລາຍຢ່າງ ໄທ໌ຍ ຈຶ່ງໄດ້ປິດສູນຢູ່ພາຄເໜືອ, ແລະ ພາຄໃຕ້ ໃນປະເທສໄທ໌ຍຫລາຍສູນ.

**<u>ຊີວິດອັນແສນ ເສົ້າໝອງ ແລະ ທຸຂທໍຣະມານ ຂອງປະຊາຊົນຊາວລາວ ແລະຊຸມຊົນເຜົ່າລາວສູງ “ມົ້ງ”</u>**

(ທີ່ໄດ້ອົພະຍົບໄປຈາກພາຄ 2 ແລະ ພຣະຣາຊອານາຈັກລາວ ໄປສູ່ຣາຊອານາຈັກໄທ໌ຍ)

ປະຊາຊົນລາວສູງ “ມົ້ງ”ຕ້ອງໄດ້ຍ່າງຜ່ານປ່າດົງພູເຂົາອັນສູງ  ກັນດານສຸດ ສ່ວນຫລາຍແມ່ນຍ່າງກາງ ຄືນ ເພື່ອຫລີກເວັ້ນການທຳລາຍຂອງ ລາວຄອມມຸຍນິສຕ໌ເຊັ່ນ: ລັດທາງຍິງ, ຈັບໄປຂ້າຖິ້ມ, ຕົວຢ່າງມີ ນ້ອງ ສາວຂອງອາຈານ ມົ້ງເຮີ ທີ່ປະຈຸບັນນີ້ຢູ່ ຣັຖມີເນໂຊຕາ. ນາງໄດ້ເລົ່າໃຫ້ຟັງວ່າ: ຕົນເອງ ພ້ອມລູກ ສາມຄົນ ແລະ ຜົວ ໄດ້ໜີພ້ອມກັນກັບພີ່ນ້ອງທັງໝົດ 60 ກວ່າຄົນ ເທົ່າທີ່ນາງຈຳໄດ້.  ໄດ້ຍ່າງຜ່ານປ່າດົງ ຫລາຍ ສິບມື້ຈຶ່ງໄດ້ເຂົ້າມາໄກ້ປາກຊັນ ຢູ່ໃຕ້ວຽງຈັນທນ໌ ຕຽມແຜນຈະຂ້າມໄປປະເທສໄທ໌ຍ ແຕ່ພໍຮຸ່ງແຈ້ງ ກໍຮູ້ວ່າພວກຄອມມຸຍນິສຕ໌ລາວແດງໄດ້ລ້ອມໄວ້ໝົດ. ທຸກຄົນໄດ້ຖືກຈັບ ພວກຜູ້ຊາຍແມ່ນຖືກມັດສອກ

ລຽນຕິດກັນອ້ອມຫ້ອຍນ້ອຍໆແຕ່ເລີກພໍສົມຄວນ ຄອມມຸຍນິສຕ໌ ລາວແດງໄດ້ໃຊ້ປືນຍິງ ພວກຜູ້ຊາຍລົ້ມ ລົງຫ້ວຍ ແຕ່ ພວກຜູ້ຍິງກັບເດັກ ແມ່ນເອົາສົ້ນປືນຕີຫົວດ້ານຫລັງ ໃຫ້ຕົກລົງຫ້ວຍໃຫ້ຕາຍ, ເວລາຕີຫົວ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂອງນາງ ໆໄດ້ກອດລູກ ສາວນ້ອຍ 4 ປີ ໃສ່ເອິກ ພໍຖືກຕິ ລູກ ແລະ ແມ່ໄດ້ຕົກລົງໄປພ້ອມກັນແຕ່ລູກບໍ່ຖືກຕິ. ຫລັງຈາກຕົກລົງຫວ້ຍ ພວກລາວແດງ ກໍໄດ້ໜີອອກໄປ. ລູກສາວນາງເຊັຍໄດ້ກອດແມ່ງຽບໄປຈົນໝົດມື້ ແລະ ໝົດຄືນ ພໍຕື່ນເຊົ້າ ຂື້ນມາ ແມ່ກໍຍັງນອນເຕັງນາງຢູ່ ນາງຕ້ອງຮອ້ງໄຫ້ ແລະ ອອກມານັ່ງຢູ່ຂ້າງແມ່ຄົນດຽວ ບິນກັບຊາກສົບທີ່ແມງວັນຍັງຕອມຢູ່. ມື້ເຄິ່ງຕໍ່ມາ ແມ່ນາງເຊັຍໄດ້ ຕື່ນຂື້ນມາ ນາງຮູ້ສຶກເຈັບທິວ ມີໜອນນ້ອຍໆ ເຕັມຕົນຕົວຂອງນາງໆ ໄດ້ເຊັດຕົນຕົວ ແລ້ວຖາມລູກສາວວ່າ: "ແມ່ຕາຍໄດ້ຈັກມື້ແລ້ວ?"ລູກສາວບອກແມ່ວ່າ: "ລູກຫິວເຂົ້າ ແລະ ນໍ້າ, ດົນແລ້ວບໍ່ໄດ້ກິນ." ແມ່ກໍກອດລູກ ແລະ ໄດ້ກວດເບິ່ງວ່າ, ມີຜູ້ລອດຕາຍຄືນາງບໍ ແຕ່ຮູ້ສຶກວ່າ ບໍ່ມີຈັກຄົນ, ນາງແນ່ໃຈວ່າ ແມ່ນພະເຈົ້າໄດ້ໄວ້ຊີວິດນາງ ໃຫ້ກັບມາເບິ່ງລູກ ຈື່ງໄດ້ພາລູກອອກມາຈາກຫ້ວຍ ກໍພໍດີບັງເອີນມີອົພະຍົບຜູ້ຊາຍມົ້ງ ສາມຄົນຜ່ານມາເຖິງ ຈື່ງໄດ້ຂໍເຂົານຳພາອອກໄປຝັ່ງໄທ໌ຍໃນຄືນນັ້ນ ນາງມາເຖິງປະເທສໄທ໌ຍໃນ ລະຫວ່າງ ກາງປີ 1976 ແລະ ກໍໄດ້ໄປເຂົ້າໂຮງໝໍຢູ່ໃນສູນອົພະຍົບ ໜອງໄຄ.

(ຂ້າພະເຈົ້າໄດ້ສັມພາດນາງ ຢູ່ໂຮງໝໍປົວປະສາດ ທີ່ຣັຖ ມີເນໂສຕາ) ເພາະນາງຍັງມີບັນຫາດ້ານປະສາຕຄູ້ມຮ້າຍ ຄູ້ມດີຢູ່. ນາງວ່າ ບາງຕອນ ນາງເຮັດຫັຽງກໍບໍ່ຮູ້ສຶກ ອ້າຍຂອງນາງເອງ ກໍເວົ້າວ່າ ມີຫລາຍຕອນນາງຍ່າງຂ້າມຖນົນໂດຽບໍ່ຮູ້ວ່າມີຣົຖແລ່ນ ຕາມຖນົນ ຫລື ບໍ່. ບາງຕອນ ນາງຄິດເຖິງເຫຕການທີ່ຜົວຖືກຂ້າຕາຍ ນາງກໍຮ້ອງໄຫ້ ແບບບໍ່ຮູ້ເຊົາ ແລະ ເຊົາບໍ່ເປັນ ພ້ອມທັງມີທ່າທີຢ້ານກົວທີ່ສຸດ. ນອກຈາກການຖືກທຳລາຍຂອງຄອມມຸຍນິສລາວແດງແລ້ວ ຍັງມີການຖືກປູ້ນຈີ້ ຈາກຄົນຮ້າຍ ທີ່ແມ່ນຄົນໄທ໌ຍ ແລະຄົນລາວ ທີ່ຕຽມປູ້ນຈີ້ຊາວລາວສູງ "ມົ້ງ" ຢູ່ສອງຝັ່ງແມ່ນໍ້າຂອງ ຈື່ງພາໃຫ້ຫລາຍຄົນຕົກ ແມ່ນໍ້າຂອງ ຕາຍ.

ມີພີ່ນ້ອງລາວສູງ "ມົ້ງ" ຄົນໜື່ງ ໄດ້ຈ້າງເຮືອຂອງໄທ໌ຍລຳໜື່ງ ທີ່ທຳທ່າໄປຕຶກປາໃນກາງແມ່ນໍ້າຂອງ ແຕ່ເຊົ້າຈົນຮອດຄໍ່າ ຈື່ງກັບມາ. ຕອນນັ້ນແມ່ນເດືອນ 6, 1976 ຍາມເລີ່ມຝົນແດ່ ເຫັນວ່າຄົນຕາຍໄຫລນໍ້າມາ ມື້ນັ້ນ ມີ 20 ກວ່າສົບ. ຫລາຍຄົນກໍໄດ້ກ່າວວ່າ ມີສົບໄຫລຕາມລຳນໍ້າຂອງມາບໍ່ຂາດ ຕັ້ງແຕ່ ປີ 1975 ຈົນເຖິງ ປີ 1985. ຫລັງຈາກນັ້ນມາ ຈະມີສົບຕາຍໄຫລນໍ້າ ມີນ້ອຍຫລືຫລາຍ ກໍບໍ່ມີໃຜຮູ້.

ສະຫາຣັຖໄດ້ປະກາສວ່າ ອົພະຍົບທີ່ໜີມາຫລັງຈາກ 1982 ແມ່ນ ໜີເສຖກິດ ບໍ່ແມ່ນໜີການເມືອງ ແຕ່ຄວາມຈິງ ບໍ່ຖືກ ເພາະສະພາບພື້ນທີ່ແລະໂອກາສບໍ່ໄດ້ອຳນວຍໃຫ້ໜີໄດ້ຕາມຄວາມຕ້ອງການ ໂດຽສະເພາະ ແມ່ນໜ່ວຍທະຫາຮ ທີ່ຢູ່ຫ່າງໄກຈາກແນວໜ້າ ໄດ້ຖືກສັດຕູປິດລ້ອມໄວ້ ບໍ່ມີໂອກາດໂຕນໜີໄດ້. ການໂຕນໜີ ທີ່ທໍຣະມານທີ່ສຸດ ແມ່ນລົງຈາກພູເຂົາໄປຫາທົ່ງພຽງ. ລາວສູງ "ມົ້ງ" ຖືກຍຸງກັດ ພາໃຫ້ເປັນພຍາດໄຂ້ປ່າ ແລະ ຖືກຝົນເຫລືອງຕາຍ ເປັນຈຳນວນຫລວງຫລາຍ ຍ້ອນກິນນໍ້າຕາມຮ່ອມຫ້ວຍ ບໍ່ລະວັງເພາະຖືກຝົນເຫລືອງກ່ອນ. ລາວຄອມມຸຍນິສຕ໌ ໄດ້ຂ້າຊາວລາວສູງ"ເຜົ່າມົ້ງ" ຢ່າງບໍ່ມີຄວາມເມຕຕາປານີໂດຽໃຊ້ເຄື່ອງ ບິນຖີ້ມລະເບີດໃສ່, ໂຮຽ ເຄມີ ຝົນເຫລືອງໃສ່ (yellow rain or Orange agent) ຕາມປ່າທຸກບ່ອນ ທີ່ສົງໄສວ່າມີລາວສູງ "ມົ້ງ" ລີ້ຊ້ອນຢູ່.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ມີຄົນລາວສູງ "ມົ້ງ" ສອງຄົນ ໜີລອດມາເຖິງໜອງໄຄ ເລົ່າວ່າ ຕອນທີ່ເຂົາເຈົ້າໜີອອກມາ ມີແມ່ຍິງຄົນລາວສູງ "ມົ້ງ" ຄົນໜຶ່ງ ຫາກໍ່ຕາຍໃໝ່ໆປະມານມື້ໜຶ່ງເທົ່ານັ້ນ ນາງມີລູກນ້ອຍອາຍຸໜຶ່ງປີນັ່ງຢູ່ບົນເອິກຂອງນາງ ແລະຍັງກິນນົມນາງຢູ່ ທັງໆທີ່ ຕົນຕົວແມ່ແຂງໝົດແລ້ວ. ລາວສູງ "ມົ້ງ"ສອງຄົນນັ້ນ ກໍຢາກຊ່ວຍລູກນ້ອຍເຕັມທີ ແຕ່ດ້ວຍຄວາມຢ້ານວ່າ ເມື່ອເດັກຮ້ອງໄຫ້ສົ່ງສຽງດັງ ສັດຕຣູຈະຮູ້ຈຸດ ແມ່ນກັນດານທີ່ສຸດ ເຂົາເຈົ້າຈຶ່ງຊ່ວຍເດັກນັ້ນບໍ່ໄດ້. ອິພະຍົບຫລາຍຄົນທີ່ມີລູກອ່ອນສອງຫລືສາມປີ ຕ້ອງເອົາຢາຝິ່ນ ໃຫ້ລູກກິນນອນຫລັບ ແລ້ວຈຶ່ງລັກຜ່ານທຸກແຫ່ງ ທີ່ຮູ້ວ່າກັນດານ ໂດຍສະເພາະຍາມກາງຄືນ ຢູ່ແຄມແມ່ນໍ້າຂອງ ລາວຄອມມຸຍ ນິສຕ໌ ຍາມເກືອບທຸກບ່ອນ.

ມີນາງສາວ ມົ້ງຊີງ (Hmong Xyooj ) ຜູ້ໜຶ່ງ ຊື່ນາງຊີງ ນາງມັກມີອາການນອນບໍ່ຫລັບ ແລະກໍໂສກເສົ້າເຮັດຫັຍງກໍຫລົງໆລືມໆ ບໍ່ຈື່ ບໍ່ຈໍາ. ນາງໄດ້ມາເຂົ້າໂຮງໝໍປົວປະສາດຢູ່ຣັດມີເນໂສຕາ. ຢູ່ທີ່ນັ້ນໜຶ່ງ ອາທິດ ແລ້ວ ນາງຈຶ່ງຮູ້ສຶກວ່ານອນໄດ້ ກິນໄດ້ແດ່ ບັງເອີນຕອນນັ້ນ ຂ້າພະເຈົ້າເຮັດວຽກຢູ່ໃນໂຮງໝໍ ປົວປະສາດ ຈຶ່ງມີໂອກາສ ຖາມນາງ ແລະໃຫ້ນາງເລົ່າເຫດການໃນຊີວິດທີ່ຜ່ານມາຂອງນາງໃຫ້ຟັງ. ນາງໄດ້ເລົ່າໃຫ້ຟັງວ່າ: " ນາງໜີອອກຈາກປ່າດົງ (LS05) ໄດ້ຍ່າງຜ່ານປ່າໄປເຖິງພູເບັ້ຍ ລົງໃສ່ເມືອງອອມ ແລ້ວຜ່ານຫລາຍພູ ພໍຜ່ານ ເມືອງອອມມາປະມານສອງ ຫລື ສາມມື້ເທົ່ານັ້ນ ແມ່ກໍເຈັບໄຊຕາຍໄປ ມື້ຕໍ່ມາ ກໍແມ່ນພໍ່ຕາຍ ເປັນພຍາດໄຂ້ປ່າ ຍ້ອນຍູງກັດ ຍັງເຫລືອແຕ່ນາງ ແລະນ້ອງສາວອາຍຸ 12 ປີ. ນາງຊີງມີອາຍຸ 14 ປີເຄິ່ງ ສອງເອື້ອຍນ້ອງໄດ້ພະຍາຍາມຕິດຕາມພີ່ນ້ອງຂອງຕົນໄປຕໍ່ ພໍມາໃກ້ຈະເຖິງພູເຂົາຄວາຍ ໄດ້ຂຶ້ນພູອັນສູງ ແລະ ຂຶ້ນຜາຫີນ ເປັນຂັ້ນເປັນຕອນໄປ ຢ່າງລໍາບາກ ແລະ ອ່ອນແຮງທີ່ສຸດ ບໍ່ມີໃຜ່ຊ່ວຍໃຜ່ໄດ້ ຕ້ອງເພິ່ງຕົນເອງເທົ່ານັ້ນ. ເມື່ອມາເຖິງຜາຊັນແຫ່ງໜຶ່ງ ສູງປະມານ 4 ຫລື 5 ຟຸດ ນາງຊີງຕ້ອງໃຫ້ນ້ອງສາວ ນັ່ງລົງແລ້ວ ຕົນເອງຂຶ້ນບ່ານ້ອງສາວ ເພື່ອໃຫ້ຂຶ້ນເທິງຜາໄດ້ ແລ້ວຈຶ່ງດຶງນ້ອງສາວຂຶ້ນ. ແຕ່ນ້ອງສາວກໍເປັນໄຂ້ ຕົນເອງກໍເປັນໄຂ້ ເວລາຕົນເອງໄປຮອດເທິງຜ່າ ໄດ້ຍື່ນມືກັບມາດຶງນ້ອງສາວ ແຕ່ດຶງບໍ່ຂຶ້ນ ຫາໃຜ່ຊ່ວຍກໍບໍ່ມີ ເພາະຜູ້ອື່ນກໍເດີນທາງອອກໄປໝົດແລ້ວ ຕົນເອງໄດ້ດຶງມືນອ້ງສາວຢູ່ບ່ອນຫັ້ນ ຈົນໝົດມື້ ແລະ ຈົນໝົດກໍາລັງ ນ້ອງສາວໄດ້ຈັບມືຂອງຕົນບໍ່ວາງ ຈົນຕາຍຄາມື. ນາງຮູ້ສຶກວ່າມືນ້ອງແຂງໝົດ ແລ້ວຈຶ່ງວາງມືຂອງນ້ອງໆ ກໍລົ້ມລົງພື້ນດິນ ບໍ່ເໜັ່ງ ຢາກກັບໄປຊ່ວຍ ແຕ່ເຫື່ອແຮງກໍໝົດ ເພາະຕົນເອງກໍເປັນໄຂ້ ແລະ ອົດເຂົ້າມາໄດ້ຫລາຍມື້ແລ້ວ ມີແຕ່ກິນເຄືອໄມ້ ໃບໄມ້ເທົ່ານັ້ນ. ຕົນເອງກໍໄດ້ລົ້ມລົງຄືກັນ ນອນຢູ່ທີ່ນັ້ນຈົນຮອດມື້ປາຍ ຈຶ່ງມີຄົນມາຈາກບ່ອນອື່ນມາຊ່ວຍ. ພໍໄດ້ກິນເຂົ້າ ແລະ ນໍ້າເລັກນ້ອຍ ແລ້ວຈຶ່ງລູກມານັ່ງໄດ້ ກໍໄດ້ເດີນທາງຕໍ່ນໍາຜູ້ທີ່ມາໃໝ່. ຕັ້ງແຕ່ນັ້ນມາ ເມື່ອໃດຄິດເຖິງນ້ອງສາວແລະພໍ່ແມ່ ກໍພາໃຫ້ໜ້າມືດ ວຽນ ຫົວທັນທີ ເປັນແນວນີ້ມາໄດ້ຫລາຍປີແລ້ວ ຈຶ່ງມາໂຮງໝໍ ຢາກໃຫ້ດີ ເປັນປົກະຕິຄືນ (ຢູ່ໂຮງໝໍແມ່ນ 1985).



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ກຣົມ 28 ທີ່ຢູ່ບວມຫລົງ (LS32 Bouam Long) ຊຶ່ງແມ່ນຍາພໍ່ ພ.ອ. ເຈີປາວມົວ ເປັນຜູ້ບັນຊາການ ຍິນຕ໌ໄດ້ໄປຕອ້ນທ່ານເຂົ້າມາປະຊຸມ ແລ້ວກໍເລີຍໄດ້ເອົາທ່ານອິພະຍົບໄປເມືອງໄທ໌ຍ ຢ່າງກະທັນຫັນ ປະລູກນ້ອງທັງໝົດໄວ້ເບື້ອງຫລັງ ຕໍ່ມາ ພວກທະຫາຣກໍໄດ້ແຕກອອກມາຕາມປ່າຕາມດົງ ຖືກລັດຍິງຕາຍໄປເປັນຈໍານວນຫລາຍຄົນ ມີພວກຖືກຈັບ ຖືກຂ້າຖິ້ມຢ່າງທາລຸນທີ່ສຸດ ແລະມີພວກເຂົ້າໄປສຫວາມີພັກ ແຕ່ກໍໄດ້ຫາຍສາບສູນໄປບໍ່ຮູ້ວ່າໄປຢູ່ໃສ ບໍ່ມີຜູ້ໃດຮູ້ສະຕາກັມຂອງເຂົາເຈົ້າ ມີບາງຄົນລອດອອກມາໄດ້ ບອກວ່າ ພວກທີ່ໄປສຫວາມີພັກ ຖືກຂ້າຖິ້ມ ແມ່ນສ່ວຍຫລາຍ ແມ້ແຕ່ເດັກເຂົາກໍບໍ່ຈິ່ງ. ຄ້າຍບວມຫລົງແມ່ນກໍາລັງແນວໜ້າຂອງພາຄ 2 ຕັ້ງຢູ່ດ້ານຫລັງຂອງສັດຕຣູ ຢູ່ທາງຕາວັນຕົກສ່ຽງເໜືອຂອງທົ່ງໄຫຫີນ ແມ່ນບ່ອນສັດຕຣູລາວ ຄ.ມ.ນ. ແລະ ວຽດນາມຄ.ມ.ນ. ໄດ້ບຸກໂຈມຕີຫລາຍຄັ້ງ ແຕ່ບໍ່ມີໂອກາສຕີໄດ້ ຈັກເທື່ອ ນັບຕັ້ງແຕ່ໄດ້ຕັ້ງຄ້າຍນີ້ ໃນປີ 1961 ເປັນຕົ້ນມາ ສັດຕຣູໄດ້ສູນເສັຍກໍາລັງ ທະຫາຣຫລາຍທີ່ສຸດ ທຸກເທື່ອທີ່ຂຶ້ນມາໂຈມຕີຄ້າຍບວມຫລົງ. ຄ້າຍນີ້ ຈຶ່ງເປັນຈຸດຍຸທທະສາຕ ອັນເຈັບແສບ ເຮັດໃຫ້ ວຽດນາມ ແລະ ລາວຄ.ມ.ນ. ຈັບຄົນລາວສູງ "ມົ້ງ" ຫລາຍຄົນໄປຂ້າຖິ້ມ ແລະ ຍັງໄດ້ດ່າຄົນມົ້ງວ່າ: "ຄົນມົ້ງ ຫົວໃຈ ພວກມັນດໍາ ຝັ່ງໄວ້ເລິກ ຄືສີ້ນມັນເນົ່າເໝັນ ເຖິງຈະລ້າງເທົ່າໃດກໍຍັງເໝັນຢູ່."



*<u>ຮູບທີ່ 190</u>. ອົພະຍົບໄປເຖິງໜອງໄຄ ປະເທສໄທ໌ຍ ເປັນຕາໜ້າເວທນາທີ່ສຸດ ຫລາຍຄົນ ຕົນຕົວເຫລືອແຕ່ກະດູກ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com







*<u>ຮູບທີ່ 191 (ຊ້າຍ) ແລະ 192 (ຂວາ)</u>. ທະຫານມົ້ງທີ່ໄດ້ເຂົ້າປ່າເຂົ້າດົງ ຕໍ່ສູ້ເພື່ອເອົາຊີວິດລອດວັນຕໍ່ວັນ ເພາະເຂົ້າມາຮ່ວມລາວ ຄ.ມ.ນ. ບໍ່ໄດ້ ແລະ ບໍ່ຍອມໃຫ້ ຄ.ມ.ນ. ເອົາໄປມັດສອກຂ້າຖິ້ມຄື ສັດເດັຍຣະສານ. ເຂົ້າປ່າຕໍ່ສູ້ເພື່ອກຽດ ແລະຕາຍກໍໃຫ້ ຕາຍຢ່າງມີກຽດ.ນີ້ແມ່ນ ຮູບຂອງພັກຟາຍດົງ (Photo from Fact Finding Commission 2004). Thank you to FFC from France .*

*(ມັນກໍເປັນຂອງທັມະດາ ເພາະຄອມມຸຍນິສຕ໌ ວຽດ ແລະ ລາວແດງ ເບິ່ງຊີວິດຄົນມົ້ງ ບໍ່ມີຄ່າເທົ່າກັບສັດເດັຽຣະສານ, ແມ່ນໃຜກໍຕ້ອງປ້ອງກັນຊີວິດຂອງຕົນ "ມົ້ງ" ບໍ່ໄດ້ໄປລຸກລານ ວຽດ ຄອມມຸຍນິສຕ໌ ມີແຕ່ ວຽດ ຄ.ມ.ນ. ມາລຸກລານມົ້ງ ແລະ ລາວ ທຸກໆຄົນ ຕ້ອງໄດ້ຕໍ່ສູ້ເພື່ອປ້ອງກັນ ການລຸກລານ ມາທຳລາຍ ປະເທສຊາຕ ບ້ານເມືອງຂອງ ຄົນລາວ ທີ່ເຂົາຮັກ ທີ່ເຂົາເຄີຍອາໄສຍ໌ເປັນບ່ອນທີ່ມເຢັນ, ເປັນບ່ອນທຳມາຫາກິນມາຕັ້ງແຕ່ເກີດ ແມ່ນໃຜກໍຕາມ ຖືກລຸກລານ ທຳລາຍຄວາມສະງົບສຸກຂອງຕົນ ແລະຊາຕຂອງຕົນ ແມ່ນຕ້ອງປ້ອງກັນດ້ວຍຊີວິດ ບໍ່ຍອມໃຫ້ຖືກທຳລາຍ).*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



Tdu Bi Xion, 18 ans.



Thao Ut, 30 ans (au premier plan), et Moua Toua Ther, 47 ans (à gauche).

## Cachés dans la jungle

Une froide nuit sans lune de janvier 2003. Tapis à même le sol, nous attendons Moua Toua Ther, le chef d'un groupe de combattants hmongs qui se cachent, avec leurs familles, au cœur de la jungle, dans la zone spéciale de Moung Xaysomboune (au nord de la capitale du Laos, Vientiane), à plus de trois jours de marche de l'endroit choisi pour ce rendez-vous secret. Il arrive, avec quelques hommes qui constitueront notre escorte. Très vite, nous nous enfonçons silencieusement dans la forêt, chargés de quelques sacs de riz et de sel. Au milieu de la nuit, nous traversons une crique et nous arrêtons pour nous reposer. Les jeunes hommes et leur chef, blottis autour du feu, essayent de récupérer. Quelques heures d'un sommeil agité, fusil à la main, avant de repartir, dans la brume de l'aube, pour s'éloigner des patrouilles de l'armée laotienne.

**En dépit de son jeune âge, Tdu Bi Xion a déjà été blessé deux fois au combat, à la main et au thorax. Thao Ut transporte l'un des deux lance-grenades dont disposent les troupes de Moua Toua Ther. Le reste de leur armement est composé de vieux fusils mitrailleurs, pour lesquels ils manquent de munitions. Zong Wa Mua a été blessé en décembre 2000 lors d'un assaut héliporté de l'armée régulière laotienne. Tenus éloignés de leurs cultures par les soldats communistes, les Hmongs en sont réduits à vivre dans des huttes et à se nourrir essentiellement des fruits de leur chasse et de leur cueillette.**



Un piège posé par les Hmongs pour capturer des oiseaux.



Le feu de camp d'une halte d'un soir.



Zong Wa Mua, 25 ans.

*<u>ຮູບທີ່ 193</u>. ນັກຕໍ່ສູ້ເພື່ອເອົາຊີວິດລອດເຖິງຈະທຸກກໍຕ້ອງເຄື່ອນທີ່ຢູ່ຕລອດເວລາ ຮູບເທິງນີ້ ໜູ່ມກາລັງຍາມ ດ້ວຍຄວາມທຸຂຍາກ ລຳບາກ ທີ່ເຮັດໃຫ້ ຊາວມົ້ງຕ້ອງ ເຄື່ອນທີ່ຕລອດ ບໍ່ມີຍາມເຊົາ ຮ້າງແຮ້ວໃສ່ສັດຕຣູ ແມ່ນຈະທຸຂຍາກ ແຂນຂາ ບາດເຈັບໜັດ ແຕ່ກໍຕ້ອງສູ້ ໃຫ້ຕາຍຢ່າງມີກຽດ, ບໍ່ຍອມໃຫ້ ຄ.ມ.ນ. ເອົາມັດສອກຂ້າຖິ້ມຄືສັດບໍ່ມີບ່ອນຢູ່ ບ່ອນນອນ ອັນແນ່ນອນ ຮອດໃສນອນຫັ້ນ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ຊີວິດທີ່ໝົດຄວາມຫວັງ ແລະ ບໍ່ມອງເຫັນອານາຄົດ ຢູ່ໃນສູນອົພຍົບ**

ຢູ່ໃນສູນອົພຍົບກໍມີແນວດີ ແລະ ແນວເສັຍຫລາຍຢ່າງຄື:

- **แนวดี** แม่นมีบ่อนเพิ่งพาอาไสย, มีความปอดพัย บ่ห่วงว่าจะมีอันตลายเຖິງຊີວິດບໍ່ຖືກທຳລາຍ ຈາກ ຄ.ມ.ນ, ມີເຂົ້າກິນ ມີນ້ຳດື່ມ ດີພໍສົມຄວນ ມີການເບິ່ງແຍງຈາກເຈົ້າໜ້າທີ່ໃນປະເທສໄທ໌ຍ ດີພໍສົມຄວນ ໃນລະຍະ ປີ 1975 ເຖິງ ປີ 2006.
- **ແນວເສັຍ** ແມ່ນຢູ່ແຕ່ໃນສູນອົພະຍົບ ບໍ່ມີສິດໄປທ່ອງທ່ຽວພາຍນອກເຖິງຈະໄປໄດ້ ກໍຕ້ອງມີຄົນໄທ໌ຍຕິດຕາມຈຶ່ງໄປໄດ້ ຊີວິດແມ່ນຈຳກັດຢູ່ໃນສູນ. ຄວາມຫວັ່ງຈະພັທນາຕົນເອງໃນປະຈຸບັນ ແລະອານາຄົດແມ່ນ ມືດມົນໄປໝົດ. ການເມືອງບັງຄັບຊະຕາກັມ ຂອງຊາວອົພະຍົບລາວ ເພາະບໍ່ແນ່ນອນວ່າຈະໄດ້ຖືກສົ່ງກັບປະເທສ ຫລືຈະໄດ້ມີໂອກາສ ໄດ້ຕັ້ງເນື້ອຕັ້ງຕົວຢູ່ໃນປະເທສໄທ໌ຍ ຫລື ໄປປະເທສ ທີ່ສາມ.

ຄວາມມືດມົນດັ່ງກ່າວ ອົພະຍົບຫລາຍຄົນຈຶ່ງໄດ້ປະສົບກັບຄວາມຕຶງຄຽດ, ມີບັນຫາປະສາຕ ເສັຍ ສມອງ ຫລື ມີປະສາຕບໍ່ດີ, ມີຄວາມຊົງຈຳເສືອມ, ມີອາຍຸສັ້ນ. ຄວາມຕຶງຄຽດເຫຼົ່ານີ້ ກໍພາໃຫ້ຫລາຍຄົນຖືກຈຳຄຸກ, ຖືກຂ້າຕາຍຍ້ອນຫົນບໍ່ໄດ້ໂຕນອອກໄປຈາກສູນ. ໃນຊີວິດຈຳກັດຢູ່ໃນສູນອົພະຍົບ ຫລາຍຄົນໄດ້ລັກໂຕນໜີ ອອກຈາກສູນໄປເພິ່ງພີ່ນ້ອງຊາວໄທ໌ຍ ແຕ່ຜົລສຸດທ້າຍ ກໍຕົກຄ້າງຢູ່ໃນປະເທສໄທ໌ຍ ບໍ່ມີໂອກາດໄດ້ໄປປະເທສ ທີ່ສາມ ເພາະຂາດບໍ່ມີ ຕ.ມ (lack of T-Number.) ຫລາຍຄົນ ເມື່ອໄປເຖິງປະເທສທີ່ສາມ ແລ້ວກໍໄດ້ເສັຍຊີວິດ ໃນຍາມນອນລັບ. ອົພະຍົບລາວຍັງ ຄ້າງຢູ່ໃນປະເທສໄທ໌ຍ ຫລາຍພັນຄົນ ເຮົາຈະເຫັນ ການແຕກຈາກນ້ຳພອງມາຫາສູນວີໄນ ແລ້ວໄປຫາສູນວັດຖ້ຳກຣະບອກ ແລ້ວ ສູນຫວ້ຍນ້ຳຂາວໃນ ປີ 2009.

ໂຊກດີ ທີ່ເຮັດໃຫ້ ອົພະຍົບລາວ ໄດ້ຮັບແສງສະຫວ່າງ ໃນຄວາມຝັ່ນຄື: ຫລາຍປະເທສໃນໂລກໄດ້ຍື່ນມືມາຊ່ວຍເຫລືອ ແລະ ຮັບເອົາ ອົພະຍົບລາວ ໄປຕັ້ງຖິ່ນຖານຊີວິດໃໝ່ ໃນປະເທສຂອງເຂົາ ຢ່າງຫລວງຫລາຍ ນັບຕັ້ງແຕ່ 1976 ເປັນຕົ້ນມາຈົນເຖິງ ປີ 2009. ແຕ່ກໍຍັງ ມີອົພະຍົບມົ້ງ ຫລາຍພັນຄົນ ຄ້າງຢູ່ຫວ້ຍນ້ຳຂາວ ໃນຣາຊອານາຈັກໄທ໌ຍ ອົພະຍົບຈຳນວນນີ້ມີບັນຫາຫລາຍຢ່າງ ທີ່ທະຫາຣໄທ໌ຍ ແລະ ລາວຄອມມຸຍນິສຕ໌ໃຊ້ເປັນເຄື່ອງມືຕໍ່ລອງກັນໃຫ້ສົ່ງຄືນ ສປປລ. ຄົນມົ້ງໃນຈຳນວນນີ້ ໄດ້ຮັບຄວາມລຳບາກຫລາຍກວ່າອົພະຍົບຊຸດອື່ນໆ ທີ່ມາອາໄສຍຢູ່ໃນຣາຊອານາຈັກໄທ໌ຍ. ເຂົາເຈົ້າໄດ້ຖືກສົ່ງກັບໄປລາວ ທັງໝົດ ໃນວັນທີ່ 28 ເດືອນທັນວາ (December) ປີ 2009 ໄປໃສ່ບ້ານໂພນຄຳ, ແຂວງ ບໍຣິຄຳໄຊ, ໃນ ສປປລ.



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**ໝາຍເຫຕ** ຂ້າຣາຊການ, ນາຍທະຫາຣ ແລະເຈົ້ານາຍຜູ້ທີ່ມີການສຶກສາສູ່ງ ສ່ວນຫລາຍແມ່ນໄດ້ໄປຢູ່ ປະເທສຝຣັ່ງເສສ ຍ້ອນປະເທສຝຣັ່ງ ໃຫ້ຄວາມສະດວກໄວໃນປີ 1975 ແຕ່ສະຫາຣັຖນັ້ນ ໄດ້ລໍຈົນຮອດ 1976 ອ້າງເຫຕຜົລວ່າ ຍັງມີສະຖານທູຕຢູ່ໃນລາວ ແລະ ກໍເລືອກແຕ່ຜູ້ທີ່ໄດ້ຮ່ວມງານກັບສະຫາຣັຖ ຄື: ຂ້າຣາຊການຂອງຢູເສດ, ນາຍພາສາ, ແລ້ວແມ່ນຊາວຄຣິສຕຽນໃນສະຫາຣັຖ ຍິນດີຕອ້ນເອົາຊາວ ຄຣິສ ຕຽນທີ່ມາຈາກລາວ, ພວກທີ່ຖືກຕອ້ນສຸດທ້າຍ ແມ່ນນາຍທະຫາຣ ແລະ ພົນທະຫາຣກັບຄອບ ຄົວ ທີ່ໄດ້ ຕໍ່ ສູ້ສົງຄາມວຽດນາມກັບສະຫາຣັຖ. ດັ່ງນີ້ ອົພະຍົບລາວສູງ ຫລື ອົພະຍົບລາວ ໃນສະຫາຣັຖ ຈື່ງມີ ແຕ່ ຝ່າຍ ທະຫາຣສ່ວນຫລາຍ. ຫລາຍຄົນຊາວອາເມຣິກັນ ເບິ່ງຄົນລາວສູງ "ມົ້ງ" ແລ້ວ ເຫັນວ່າຍັງ ເປັນຄົນ ສໄມໂບຮານຢູ່ ( ມັນກໍຈິງ ເພາະຍາມສົງຄາມ ປະຊາຊົນ ລາວສູງ "ມົ້ງ" ຫລົ້ຢູ່ແຕ່ໃນປ່າ.)

**<u>ຕໍ່ນີ້ໄປແມ່ນການບັນທຶກຂອງນາຍທະຫາຣ ທ່ານ ພ.ອ. ວ່າງເນັ້ງ ທີ່ເປັນຫົວໜ້າສູນ ອົພຍົບ ບ້ານວິໄນ ໃນ ຣາຊອານາຈັກໄທຍ໌ໄທ໌ຍ 1979 -1984</u>**

ໄດ້ເຂົ້າໄປຮັບໜ້າທີ່ເປັນຜູ້ຕາງໜ້າຊາວອົພຍົບໃນສູນວິໄນ ເດືອນກັນຍາ September 1979 ແທນທ່ານ ວ່າງຢີ ທີ່ໄດ້ເດີນທາງໄປປະເທສທີ່ສາມ ໃນສະຫາຣັຖ. ໃນເວລາທີ່ໄດ້ມາຮັບໜ້າທີ່ນີ້ ເຕັມໄປດ້ວຍບັນຫາ ຫຍູ້ງຍາກ ກັນດານ ເພາະໄດ້ມີຫລາຍແນວເກີດຂຶ້ນມາຈາກ ການຍົກຍ້າຍ ຜູ້ອົພຍົບ ສູນໜອງຄາຍ ແລະ ສູນນ້ຳຝອງ ເຂົ້າມາຢູ່ຮ່ວມກັນ ທີ່ສູນວິໄນ ເກີນຈຳນວນ ທາງການສ້າງຂຶ້ນແມ່ນເພື່ອ 12,000 ຄົນ ແຕ່ ໄດ້ເຂົ້າມາຮ່ວມກັນທັງໝົດແມ່ນ 42,000 ຄົນ. ຈື່ງໄດ້ແບ່ງການປົກຄອງເປັນ 7 ເຂຕ.ໂດຍມີຜູ້ຕາງໜ້າເຂ ຕ ແລະຄນະກັມການຄົບຖວ້ນ ຕາມໂຄງການອົພະຍົບ. ເຂຕ 5 ແມ່ນຈັດ ສະເພາະໃຫ້ຊາວອົພະຍົບລາວ ລຸ່ມ ບໍ່ດົນ ຫລັງຈາກມາຢູ່ຮ່ວມກັນ ສອງເຜົ່າກໍໄດ້ເກີດມີບັນຫາ ຍ້ອນຊາວໝູ່ມຄັດແຍ້ງກັນ ທາງການຈື່ງ ເຫັນວ່າປະເພນີ ແລະພາສາສອງເຜົ່າ ພາໃຫ້ບໍ່ເຂົ້າໃຈກັນ ຈື່ງໄດ້ຍ້າຍຊາວອົພະຍົບລາວ ທີ່ຢູ່ເຂຕ 5 ໄປ ຢູ່ນາໂພ. ຕັ້ງແຕ່ນັ້ນມາ ເຂຕ 5 ກໍບໍ່ມີອົພະຍົບອີກຕໍ່ໄປ. ເຖີງຈະຍ້າຍເຜົ່າລາວໄປນາໂພ ແລ້ວກໍຕາມ ບັນຫາອົພະຍົບໃນສູນວິໄນ ກໍບໍ່ໄດ້ດີຂື້ນ ເພາະມີຈຳນວນອົພະຍົບຫລາຍຈຳພວກ ມີທັງມິດ ທັງສັດຕຣູ ທັງຜູ້ບໍ່ຫວັງດີ ຫາໂອກາສນຳພາອົພະຍົບບາງຄົນໄປຄ້າເຖື່ອນ ແລະເຮັດບໍ່ດີຫລາຍຢ່າງ ທີ່ສ້າງຄວາມ ເສັຍຫາຍ ບໍ່ປອດໄພ໌ຍຢູ່ໃນສູນວິໄນ ຈື່ງມີການຈັບກູມຊາວອົພະຍົບໄປຄູມຂັງ ບໍ່ເວັ້ນແຕ່ລະວັນ. ມີທັງ ການຈໍຣະກັມ ຂ້າກັນຖີ້ມໃນເວລາກາງຄືນ ເປັນບັນຫາໜ້າວິຕົກຢ້ານກົວຢ່າງຍິ່ງ ທ່ານວ່າງເນັ້ງ ຈື່ງໄດ້ຕັດ ສິນໃຈວາງແຜນປ້ອງກັນສູນ ຖ້າຢາກຢູ່ໃນສູນອີກຕໍ່ໄປ ຕ້ອງມີການຈັດຕັ້ງ ຈື່ງໄດ້ວາງແຜນການ ຈັດຕັ້ງ ດັ່ງນີ້ຄື:

ຄນະກັມມະການກາງ, ຄນະກັມມະການເຂຕ ຄນະກັມມະການຄູ້ມ ແລະຄນະກັມມະການຂອງແຕ່ລະ ອາຄານ (ອາຄານໜື່ງກໍມີຫລາຍຄອບຄົວ). ການປະຕິບັດໜ້າທີ່ແລະພາຣະກິຈຂອງແຕ່ລະ ຄນະກັມມະ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ການ ບໍ່ໄດ້ປະຕິບັດເຕັມພິນ ຍ້ອນຊີວິດອັນບໍ່ແນ່ນອນ ໃນການອອກໆເຂົ້າໆໄປໃນປະເທສທີ່ສາມ ຈຶ່ງພາໃຫ້ການແກ້ໄຂບັນຫາຍຸ້ງຍາກ ແລະຄ້າງຄາ ບໍ່ທັນກັບຄວາມຕ້ອງການ ຈຶ່ງໄດ້ມີການດັດແປງ ແລະ ຮ້ອງຂໍການຊ່ວຍເຫລືອຈາກອົງການ ສະຫະປະຊາຊາຕ ໃຫ້ມີສະຖານທີ່ທຳງານຂອງສູນກາງຂຶ້ນ ຢູ່ບ້ານວິໄນ ໃຫ້ບຸກຄົນດັ່ງ ຕໍ່ລົງໄປນີ້:

- ✓ ປະທານ ຫລື ຜູ້ຕາງໜ້າຊາວອົພະຍົບ,
- ✓ ຜູ້ຮອງປະທານ ສອງທ່ານ ແລະ ຄນະເລຂານຸການ, ຄນະກັມມະການກຳກັບເງິນ (ຫາລາຍໄດ້), ຄນະກັມມະການເບິ່ງແຍງ ການໃຊ້ຈ່າຍເງິນຄຳ, ຄນະກັມມະການ ກຳບັນຊີ ຄົນເຂົ້າ ຄົນອອກ, ຄົນເກີດ ຄົນເສັຍຊີວິດ ແລະ ຄົນເດີນທາງໄປປະເທສທີ່ສາມ, ຄນະກັມມະການ ຊາວໜຸ່ມ ແລະ ຄນະກັມມະການເບິ່ງແຍງຄວາມປອດໄພັຍ.



*<u>ຮູບທີ່ 194</u>. ທ່ານ ພ.ອ. ວ່າງເນັ້ງກຳລັງຕັດດ້າຍເປີດພິທີສະຫລອງປີໃໝ່ຢູ່ສູນວິໄນປີ 1980 ຄົນສາມຄົນຮຽງກັນ ຕັດດ້າຍ ແມ່ນທ່ານ ວ່າງເນັ້ງເບື້ອງຫລັງໃສ່ເສື້ອສີຂາວຂຽວເຫລືອງ ແມ່ນ ທ່ານວື໋ໄນ ໄດ້ກັບໄປ ສປປລ ແຕ່ຫາຍສາບສູນ ຂ່າວວ່າຕາຍ ແລ້ວ ຜູ້ເສື້ອສີ່ຂຽວມີເຄື່ອງດຳໆຢູ່ໃນຖົງ ແມ່ນເນັ້ງລໍ ຢາງ ເຫລືອນັ້ນບໍ່ຮູ້ຊື່.*

**ຜູ້ມີໜ້າທີ່ຮັບຜິດຊອບ ຂອງຄນະກັມມະການ ສູນກາງ ຄື:**

- ✓ ກຳກັບການດູແລ, ການແກ້ໄຂ ບັນຫາທຸກຢ່າງພາຍໃນສູນ,
- ✓ ຕິດຕໍ່ເຈົ້າໜ້າທີ່ໄທ໌ຍ ແລະ ອົງການຕ່າງໆໃຫ້ເຂົ້າມາຊ່ວຍ ຊາວອົພຍົບ,


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ✓ ວາງແຜນເພື່ອຮັກສາ ຄວາມປອດໄພ ຄື ຈັດຕັ້ງໜ່ວຍເວັນຍາມກາງຄືນ ຕາມທຸກອາຄານ,
- ✓ ຕິດຕໍ່ທຸກ ອົງການດ້ານ ສາສນາ, ດ້ານການຊ່ວຍເຫລືອ ເພື່ອມາຊ່ວຍເຫລືອຊາວອົພຍົບໃນສູນ,
- ✓ ວາງແຜນການສຶກສາ, ການອານາໄມ, ການຫາຢູ່ຫາກິນ ແລະ ວາງແຜນໃນອານາຄົດ,
- ✓ ການຊີ້ແຈງແນະນຳ ອານາຄົດຂອງການເປັນອົພຍົບ ເພື່ອໃຫ້ທຸກຄົນ ຫັນມາເຂົ້າໃຈກັນ ເປັນກ້ອນເປັນໜ່ວຍ ຢູ່ຮ່ວມກັນ ຢ່າງມີຫລັກການ,
- ✓ ສຶກສາການຕັດສິນໃຈແລະ ຕິດຕາມ ຜູ້ໄດ້ໄປຕັ້ງຖິ່ນຖານຊີວິດໃໝ່ໃນປະເທສທີ່ສາມ, ແລະ
- ✓ ສຶກສາແກ້ໄຂບັນຫາຕ່າງໆຫລາຍຢ່າງໃນສູນ.



*<u>ຮູບທີ່ 195</u>. ທ່ານ ວ່າງເນັ້ງກຳລັງກ່າວຄຳປາໄສໃນທີ່ປະຊຸມເພື່ອ ວາງແຜນການຈັດຕັ້ງໃນ ປີ 1980 ທ່ານ ວ່າງເນັ້ງ ຫົວໜ້າສູນອົພຍົບ ບ້ານວິໄນ ກຳລັງກ່າວຄຳປາໄສ ແລະ ຮ່ວມພິທີເປີດສູນໃຫ້ພີ່ນ້ອງ ທີ່ໄດ້ອົພຍົບໄປຈາກລາວໃຫ້ຢູ່ຮ່ວມກັນດ້ວຍຄວາມຮັກແພງ ແລະ ເບິ່ງແຍງກັນ ໃນຍາມຈົນຕາແຈ ຢູ່ໃນສູນ ທີ່ຍັງມອງບໍ່ເຫັນຄວາມຫວັງໃນອານາຄົດ.*

**ຄນະກັມມະການເສັ່ງ (ຕະກູນ)**

ເຜົ່າລາວສູງ "ມົ້ງ" ມີ18 ຕະກູນ ຫລື ເສັ່ງ ດັ່ງນີ້: ວ່າງ, ຢາງ, ລີ, ຊົງ,ເຮີ, ມົວ,ຄ້າງ, ກົງ, ທ່າວ, ພ້າ, ຫາງ, ວື້, ລໍ, ເສັ່ງ tsheej), ຊົງ,. ຕໍ່ໆໄປ ໃຫ້ມີໜ້າທີ່ສຳຄັນດັ່ງຕໍ່ໄປນີ້:

- ✓ ມີໜ້າທີ່ເປັນຜູ້ອາວຸໂສ ແລະ ຊີ້ຂາດໃນການແກ້ໄຂບັນຫາຕ່າງໆໃນຕະກູນຂອງໃຜ່ລາວ
- ✓ ມີໜ້າທີ່ເປັນຄນະກັມມະການກາງ ໃນການແກ້ໄຂບັນຫາທຸກຢ່າງ,
- ✓ ມີໜ້າທີ່ແກ້ໄຂບັນຫາ ແລະ ການດູແລ ທຸກຢ່າງພາຍໃນຕະກູນຂອງຕົນ,



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ✓ ມີໜ້າທີ່ແກ້ໄຂບັນຫາການແຕ່ງດອງພາຍໃນສອງຕະກູນທີ່ກ່ຽວຂ້ອງກັນ ໃຫ້ຫລຸລ່ວງ ດ້ວຍຄວາມຖືກຕ້ອງປອງດອງກັນ,
- ✓ ມີໜ້າທີ່ ຮ່ວມແກ້ໄຂ ກັບຕະກູນອື່ນ ໃນເມື່ອຖືກຮຽກຮ້ອງໃຫ້ຊ່ວຍ.

**ຄນະກັມມະການ ກວດກາ ພາຍໃນສູນ**

ຄນະກັມມະການ ກວດກາ ນີ້ແມ່ນໝາກຫົວໃຈສຳຄັນສຸດໃຫ້ແກ່ຊາວອົພະຍົບ ຄວາມເຊື່ອ ແລະ ການໄວ້ວາງໃຈແມ່ນຂຶ້ນກັບຄນະກັມການ ກວດກາ ນີ້ຄື:

- ✓ ກວດກາ ທຸກສະຖານທີ່ ຫລື ອາຄານ ທີ່ມີຄວາມສົງໄສຍ ເພື່ອລາຍງານໃຫ້ສູນກາງຊາບ,
- ✓ ກວດກາ ຄວາມລຽບຮ້ອຍຂອງຄນະກັມການ ສນູກາງ ແລະ ການເຄື່ອນໄຫວຕ່າງໆໃນສູນ,
- ✓ ກວດກາ ຄນະກັມການ ຕະກູນເສັງ ເພື່ອໃຫ້ມີຄວາມຍຸຕິທັມຢູ່ສເມີ.

**ຄນະກັມມະການ ທີ່ປຶກສາ**

ເປັນຄນະກັມມະການອາວຸໂສ ໃຫ້ອອກຄວາມຄິດຄວາມເຫັນ ກ່ຽວກັບບັນຫາຕ່າງໆທີ່ເກີດຂຶ້ນ ຫລືຈະເກີດຢູ່ໃນສູນອົພະຍົບ. ຄນະກັມມະການນີ້ ແມ່ນທ່ານ ວ່າງເນັ້ງ ໄດ້ເລືອກມາຈາກບັນດາ ນາຍທະຫາຣ, ນາຍຕຳຣວຈ, ຂ້າຣາຊການ ແລະພົລະເຮືອນຜູ້ທີ່ມີຄວາມຮູ້, ມີປະສົບປະການ ຫລາຍດ້ານມາຊ່ວຍວາງແຜນ ແລະແກ້ໄຂຊ່ວຍ. ໄດ້ຈັດຕັ້ງຄນະກັມການຕ່າງໆສຳເຣັດ ທ່ານໄດ້ຮຽກປະຊຸມຂຶ້ນເພື່ອ ມາແກ້ໄຂບັນຫາ ສາມຂໍ້ຄື:

- ✓ ການເຂົ້າ ແລະ ການອອກ ຂອງຊາວອົພະຍົບ,
- ✓ ການເວັນຍາມ ແລະ ການໝູນວຽນຂອງ ແຕ່ລະອາຄານ ຊຶ່ງມີຫລາຍອາຄານດ້ວຍກັນ,
- ✓ ການຮັກສາຄວາມປອດໄພ້ຍຂອງຊາວອົພະຍົບ.

ທ່ານອາທິບາຍເຫຕການ ວ່າພວກເຮົາແມ່ນອົພະຍົບ ມາຢູ່ໃນສູນບ້ານເມືອງຂອງເພີ່ນ ຊີວິຕພວກເຮົາໄດ້ປ່ຽນແປງໄປ ບໍ່ມີສິດເສຣີພາບຕາມໃຈຄືຢູ່ເມືອງລາວ ຫາກຜູ້ໃດເຮັດຜິດ ກໍຕ້ອງໄດ້ຮັບໂທສຕາມກົດໝາຍບ້ານເມືອງຂອງປະເທສທີ່ເຮົາອາໄສຍຢູ່ ອົພະຍົບເຮົາແມ່ນບໍ່ມີສິດທັ່ງ ພຽງແຕ່ເອົາຕາເບິ່ງເທົ່ານັ້ນ ພວກເຮົາຕ້ອງຊອກຫົນທາງ ທຳຄວາມເຂົ້າໃຈ ໃຫ້ຢູ່ຮ່ວມກັນໃຫ້ໄດ້ ແລະໃຫ້ເຂົ້າໃຈກັນ ໃນການນຳພາເພື່ອຄວາມຢູ່ລອດໄປສູ່ສອງກໍຣະນີຄື: ໄປປະເທສທີ່ສາມຫລືກັບໄປລາວ. ຜູ້ທີ່ຈະມີສິຕຢູ່ໃນປະເທສໄທ໌ຍຕ້ອງແມ່ນຜູ້ທີ່ມີສັນຊາຕເປັນໄທ໌ຍເທົ່ານັ້ນ. ສ່ວນລູກເຕົ້າພວກອົພຍົບ ທີ່ເກີດຢູ່ໃນສູນ ກໍຖືວ່າແມ່ນຄົນຕ່າງດ້າວ ບໍ່ແມ່ນສັນຊາຕຂອງປະເທສໄທ໌ຍ.

ເມື່ອອົພະຍົບທຸກຄົນຮູ້ວ່າ ທາງອອກມີພຽງ ສອງທາງເທົ່ານັ້ນ, ພວກເຮົາຄວນສຶກສາ ແລະ ຕັດສິນໃຈ ວ່າຈະເລືອກທາງອອກທາງໃດ ຈຶ່ງດີ ຈະໄປປະເທສທີ່ສາມ ຫລືຈະກັບໄປປະເທສລາວ ຫລື ຈະອາໄສຍຢູ່ໃນ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ສູນແບບໝົດຄວາມຫວັງນີ້, ຈຶ່ງສົມຄວນໃຫ້ທຸກຄົນວາງແຜນ ຕຽມຕົວໂດຽສະເພາະ ແມ່ນຊາວໜຸ່ມ ຕ້ອງຮຽນໜັງສື, ຮຽນອາຊີບຕ່າງໆ, ຮຽນການຟ້ອນ ແລະ ລິລາຕ່າງ ໆດ້ານຮີດຄອງປະເພນີຂອງລາວສູງ“ມື້ງ” ເຮົາ ເມື່ອມີໂອກາສຈະໄດ້ໃຊ້. ໃຫ້ໝົດທຸກຄົນຕື່ນຕົວ ແລະປັບຕົວໃໝ່ ເພື່ອຈະບໍ່ສາຍເກີນໄປ. ເມື່ອໄດ້ໃຫ້ຄຳອາ ທິບາຍຈົບລົງ ກໍມີຄຳຖາມຫລາຍຢ່າງຖາມຂຶ້ນໄດ້ ພາໃຫ້ມີຫລາຍຄົນນ້ຳຕາຕົກ ເພາະຄົນເຮົາສ່ວນຫລາຍ ແມ່ນບໍ່ມີການສຶກສາ ມີແຕ່ໄດ້ຕໍ່ສູ້ສົງຄາມ ລໍຄຳສັ່ງເທົ່ານັ້ນ ເມື່ອຂາດຜູ້ນຳແມ່ນບໍ່ມອງເຫັນທາງອອກ. ອີກຢ່າງນຶ່ງ ຢູ່ໃນສູນອົພະຍົບ ກໍມີຫລາຍສາສນາ ທີ່ພາໃຫ້ເຂົ້າໃຈກັນຍາກ ແລະ ບໍ່ຄ່ອຍລ່ອງລອຍກັນໄດ້ ຂ້າພະເຈົ້າຈຶ່ງໄດ້ອາທິບາຍໃຫ້ທຸກຄົນໄດ້ເຂົ້າໃຈ ໃນການຢູ່ຮ່ວມກັນຄື ສາສນາແມ່ນສິ່ງ ທີ່ຄົນເຮົາເຊື່ອຖື ຜູ້ໃດຈະເຊື່ອຖືແນວໃດກໍໄດ້ ແຕ່ຢ່າເອົາມາບັງຄັບກັນ ຫລືພົວພັນກັບຄວາມຢູ່ຮ່ວມກັນ ດ້ານການປົກຄອງ ດ້ານການຈັດຕັ້ງ ຢູ່ໃນສູນອົພະຍົບ ຂໍໃຫ້ດຳເນີນຢູ່ໃນຄອບຄົວ ຫລືໃນກູ່ມສາສນາຂອງຕົນ ຄວາມຮ່ວມມືແມ່ນສ່ວນໜຶ່ງ ທີ່ຈະໄດ້ຮັບການຊ່ວຍເຫລືອຈາກພາຍນອກ ຕາມຄວາມຕ້ອງການ. ຄວາມຂັດແຍ້ງກັນຢູ່ໃນການຈັດຕັ້ງຢູ່ໃນສູນ ແລະການໂຈມຕີຊິ່ງກັນແລະກັນ ແມ່ນ ການແບ່ງແຍກກັນ ບໍ່ໄດ້ເກີດຜົນດີ ມີແຕ່ເຮັດໃຫ້ເກີດຄວາມເສັຍຫາຍ ຫລົ້ມຈົມ ບໍ່ມີຄວາມກ້າວໜ້າ, ຂໍໃຫ້ທຸກຄົນຫັນມາຮ່ວມມືກັນ ເພື່ອເຮັດແທ້ທຳຈິງ ເປີດອົກເປີດໃຈ ຮ່ວມກັນເພື່ອຄວາມກ້າວໜ້າ ແລະ ຄວາມປອດພັຍ.

ຫລັງຈາກປະຊູມແລ້ວ ການດຳເນີນງານດ້ານການຈັດຕັ້ງ ການກວດກາ ແລະການເວັນຍາມ ໄດ້ເຮັດ ໃຫ້ການຄາດຕະກັມ, ການຂີ້ລັກ ແລະ ການຄ້າເຖື່ອນ ລົດລົງຢ່າງບໍ່ໜ້າເຊື່ອ, ທຸກຄົນມີຄວາມຮັກແພງກັນເຂົ້າໃຈກັນ ທຳທຸກຢ່າງເພື່ອສ່ວນຣວມໃນສູນອົພຍົບ ພາໃຫ້ບັນຫາໄດ້ເບົາບາງລົງເກືອບ100 ເປີເຊັນ ຊຶ່ງນັບວ່າ ເປັນບູນວາດສະນາ ຂອງຊາວອົພະຍົບໃນສູນວິໄນ, ພ້ອມກັນໃນເວລານັ້ນ ແມ່ນການ ສັບປ່ຽນຫົວໜ້າ ສູນອົພະຍົບ ຂອງໄທ໌ຍທີ່ມາໃຫ້ການ ດູແລສູນ ໄດ້ແກ່ທ່ານ ບັນດິດ ໂອມໄທສົງ ເປັນຜູ້ມີຄວາມຮູ້ສູງ ມີຈິດໃຈກວ້າງຂວາງ ເຂົ້າໃຈການນຳພາ ທ່ານມັກເອົາສຽງສ່ວນຫລາຍເປັນຫລັກ ເພື່ອໃຫ້ຊາວອົພຍົບເປັນກ້ອນເປັນກູ່ມຢ່າງດີ ທ່ານໄດ້ເຂົ້າໄກ້ສິດກັບຫົວໜ້າສູນ ທ່ານວ່າງເນັ້ງ ແລະໄດ້ຖາມເຖິງເຫດການຕ່າງໆໃນຍາມສົງຄາມຢູ່ລາວ ທີ່ໄດ້ເຮັດໃຫ້ຊາວລາວກາຍເປັນອົພະຍົບ ເພາະມີຫລາຍແນວທີ່ປະຊາຊົນໄທ໌ຍສົນໃຈຍ້ອນເປັນບ້ານໄກ້ເມືອງຄຽງ.

ທ່ານຫົວໜ້າສູນຄົນນີ້ ບໍ່ແມ່ນແຕ່ເບິ່ງແຍງອົພະຍົບເທົ່ານັ້ນ ແຕ່ຍັງໄດ້ເຊີນທ່ານ ຜູ້ວ່າຣາຊການຈັງຫວັດທີ່ໄດ້ເຂົ້າມາຮັບໜ້າທີ່ໃໝ່ ຄື ທ່ານທອງດຳ ບັນຊື່ນ ຜູ້ເປັນຫົວໜ້າຜູ້ນຳດ້ານຄວາມປອດພັຍແລະ ຝ່າຍເຈົ້າໜ້າທີ່ຕຳຣວຈມາຢ້ຽມຢາມ ຊາວອົພະຍົບໃນຍາມບູນກິນຈຽງ. ທ່ານວ່າງເນັ້ງ ກໍໄດ້ຂອບໃຈພຣະບາດສົມເດັຈພຣະເຈົ້າ ມະຫາຊີວິດໄທ໌ຍ, ຣັຖບານໄທ໌ຍ, ແລະ ປະຊົນໄທ໌ຍທຸກຄົນທີ່ໄດ້ໃຫ້ການ ຕອ້ນຮັບຊາວອົພະຍົບລາວ ແລະໄດ້ເລົ່າເຫຕການຕ່າງໆ ທີ່ ພັຄຄອມມຸຍນິສຕ໌ລາວ ລູກນ້ອງແກວຄອມມຸຍນິສຕ໌ ໄດ້


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ມ້າງເພສັນຍາ ຕ່າງໆເຮັດໃຫ້ລາວຕ້ອງແຕກແຍກກັນ ໃຊ້ແກວຄອມມຸຍນິສຕ໌ ມາເຂັ່ນຂ້າ ຝ່າຍ ວຽງຈັນຫນ໌ ຢູ່ບໍ່ໄດ້ ຈື່ງຕ້ອງໄດ້ອອກຈາກປະເທສ, ພ້ອມກັນ ກໍໄດ້ເລົ່າເຫຕການ ຄັ້ງໜ້າ ທີ່ອາດຈະລາມ ມາເຖີງ ປະເທສໄທ໌ຍ ເພາະຄອມມຸຍນິສຕ໌ ແກວຢາກ ຂະຍາຍ ອິຕິພົນໄປທົ່ວ ເອເຊັຍຕາວັນອອກສ່ຽງໃຕ້. ຫລັງຈາກຄໍາເລົ່າຂອງ ທ່ານວ່າງເນັ້ງ ໃນປີ 1979 ນັ້ນ ພາໃຫ້ປະຊາຊົນໄທ໌ຍ ຜູ້ນໍາໄທ໌ຍ ຫລາຍຄົນໄດ້ຈັດການສັມະນາ ເຖີງສຖານະການຕ່າງໆ ແລະໄດ້ເຊີນທ່ານວ່າງເນັ້ງໄປຮວ່ມ ແລະໃຫ້ອາທິບາຍເຫຕ ການຕ່າງໆທີ່ຜ່ານມາຢູ່ລາວ ກ່ຽວກັບນະໂຍບາຍອັນໂຫຕຮ້ຽມຂອງຄອມມຸຍນິສຕ໌ ຕໍ່ຝ່າຍວຽງຈັນຫນ໌ ໃຫ້ຜູ້ມາຮວ່ມສັມະນາຟັງ ຈື່ງເຮັດໃຫ້ທ່ານອາທິບໍດີປຣັດກະຊວງມະຫາດໄທ ແລະຫົວໜ້າກຣົມຈິຕຕະ ວິທະຍາກອງທັພບົກໄທ໌ຍ ໄດ້ເດີນທາງໄປຢ້ຽມຢາມສູນອົພະຍົບວິໄນ ແລະຕໍ່ຈາກນັ້ນ ກໍແມ່ນທ່ານນາຍພົນເອກຣັຖມົນຕຣີກະຊວງມະຫາດໄທ ໄດ້ໄປຢ້ຽມຢາມສູນອົພະຍົບ ຕໍ່ຈາກນັ້ນ ກໍແມ່ນບັນດາຜູ້ຮອງ ຂອງຜູ້ວ່າຣາຊການຈັງຫວັດ ທົ່ວປະເທສໄທ໌ຍ 100 ກ່ວາທ່ານ ໄດ້ໄປຢ້ຽມຢາມສູນອົພະຍົບ ຈາກນັ້ນກໍແມ່ນທ່ານຜູ້ວ່າຣາຊການຈັງຫວັດທົ່ວປະເທສໄທ໌ຍ ນໍາພາໂດຍຜູ້ວ່າຣາຊການຈັງຫວັດເມືອງເອກ ບາງ ກອກ ຊື່ງແມ່ນພົນເອກ ໄດ້ພາ ຄນະໄປຢ້ຽມຢາມສູນອົພະຍົບ. ຈຸດມູ້ງໝາຍ ກໍແມ່ນຢາກຮູ້ ສຖານະການ ຕ່າງໆໃນລາວ ເພື່ອຈະໄດ້ຕຽມການປ້ອງກັນປະເທສ ທີ່ຈະເປັນເປົ້າໝາຍຂອງຄອມມຸຍນິສຕ໌ໃນຂັ້ນຕໍ່ໄປ.

ທ່ານວ່າງເນັ້ງໄດ້ອາທິບາຍຢ່າງແຈ່ມແຈ້ງວ່າ ຊາວອົພຍົບຂໍເພິ່ງຢູ່ປະເທສໄທ໌ຍຊົ່ວລະຍະນື່ງ ຫາກສຖານະການປ່ຽນແປງ ຖ້າກັບຄືນໄປໄດ້ ກໍຕ້ອງກັບປະເທສຂອງຕົນ ຜູ້ທີ່ໄປປະເທສທີ່ສາມໄດ້ ກໍຈະໄປເລື້ອຍໆ ຜູ້ເກີດຢູ່ໃນສູນອົພະຍົບ ກໍຍັງມີຖານະເປັນອົພະຍົບ ບໍ່ແມ່ນປະຊາຊົນໄທ໌ຍ. ເມື່ອຄນະຜູ້ວ່າຣາຊການຈັງຫວັດ ໄດ້ຍິນດັ່ງນັ້ນ ກໍດີໃຈ ແລະຕົບມືເປັນກຽດໃຫ້ທ່ານວ່າງເນັ້ງ ທີ່ເລົ່າຕໍ່ໄປວ່າ ເຖີງ ຊີວິດອົພະຍົບຢູ່ໃນສູນຈະທຸກຍາກພຽງໃດກໍຕາມ ຊາວອົພະຍົບກໍຕ້ອງພຍາຍາມໃຊ້ຄວາມອົດທົນ ແລະ ລໍໂອກາສໃຫ້ໄດ້ກັບປະເທສ ຫລື ໄດ້ໄປປະເທສທີ່ສາມ ເພື່ອຊອກຫາຊີວິດໃໝ່ ອັນມີສິດເສຣີພາບ. ເມື່ອອາທິບາຍຈົບ ຜູ້ວ່າຣາຊການຈັງຫວັດ ທຸກຄົນໃດ້ພໍໃຈ. ຫລັງຈາກປະຊູມໃນຄັ້ງນີ້ ທີ່ໄດ້ສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ວ່າຣາຊການແລະເຈົ້າໜ້າທີ່ຫລາຍຄົນ. ຝ່າຍປົກຄອງໃນຈັງຫວັດເລີຍຈື່ງໄດ້ຖືກເຊີນເຂົ້າມາຮ່ວມການແຂ່ງຂັນກິລາ ຢູ່ໃນສູນອົພະຍົບ ແລະໄດ້ເຊີນຊາວອົພະຍົບໄປຮ່ວມການເດີນຂບວນ ແລະ ການແຂ່ງຂັນກິລາຕ່າງໆ ກັບປະຊາຊົນໄທ໌ຍ ໃນຈັງຫວັດເລີຍ.

## <u>ການສໍາຣວຈແນວຄິດຂອງຊາວອົພຍົບໃນສູນວິໄນ ເພື່ອໃຫ້ເຂົ້າໃຈແລະໃຫ້ແນວຄິດ ຮູ້ຕຽມອານາຄົດຄັ້ງໜ້າ</u>

- ການສໍາພາດຜູ້ມີອາຍຸສູງແລະຜູ້ທີ່ອາວຸໂສ ແມ່ນມີແນວຄິດ “ຢາກກັບໄປປະເທສລາວ ບ້ານເກີດເມືອງນອນ“ ແມ່ນຈໍານວນສ່ວນຫລາຍ,


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ການສຳພາດຊາວໜຸ່ມແລະຜູ້ທີ່ມີການສຶກສາແດ່ ອາຍຸຍັງຢູ່ໃນຂັ້ນ 45 ປີ ລົງລຸ່ມ ແມ່ນຢາກໄປປະເທສທີ່ສາມ ແລະຢາກໄປເລີ່ມຕົ້ນຊີວິດໃໝ່ ສ້າງຄວາມຫວັ່ງໃໝ່ ບໍ່ຢາກກັບໄປທໍຣະມານ ກັບ ຊີວິດທີ່ຢູ່ໃນການຄວບຄຸມຂອງຄອມມູຍນິສຕ໌ ທີ່ຈະເຮັດໃຫ້ຂາດສິດເສຣີພາພ ທຸກຢ່າງແມ່ນຈຳນວນ ສ່ວນຫລາຍ. ສຳຫລັບຄວາມຄິດຂອງທ່ານວ່າງເນັ້ງ ຊຶ່ງເປັນຜູ້ຕາງໜ້າຊາວອົພຍົບ ເປັນຜູ້ໄດ້ຮັບບົດຮຽນ ຫລາຍຢ່າງທີ່ຜ່ານມາ ຍັງຈືດຈຳ ແລະເຈັບໃຈສຸດຢູ່ໃນອົກ ຄື: ຊາວ ອົພຍົບ ລາວສູງ "ມົ້ງ" ຕ້ອງການ ຜູ້ນຳພາເປີດອົກເປີດໃຈ ມີແຜນນຳພາອັນດີ ມີການຕັດສິນໃຈເຮັດອັນໃດ ແມ່ນໃດ້ຮັບຄວາມເຫັນດີ ຈາກປະຊາຊົນສຽງສວ່ນຫລາຍ ເປັນຫລັກ ຕ້ອງສຶກສາໃຫ້ດີ ຖີ່ຖວ້ນ ກ່ອນການລົງມືປະຕິບັຕ ຢ່າເຫັນແກ່ອຳນາດ, ເຫັນແກ່ເງິນ, ເຫັນແກ່ພັຄພວກ ທຸກຢ່າງຕ້ອງຂາວສະອາດ ຈຶ່ງຢາກເຮັດນຳ, ຢາກຢູ່ຮ່ວມ ແລະ ຢາກໄປນຳ. ຜູ້ຈະມາເປັນຜູ້ນຳເຜົ່າລາວສູງ "ມົ້ງ" ແລະລາວ ແມ່ນບໍ່ງ່າຍໆ ຕ້ອງແມ່ນຜູ້ທີ່ ມີຄວາມປະສົບ ປະການ, ມີການສຶກ ສາຫລາຍດ້ານ ການເປັນຜູ້ນຳ ທີ່ມີປະວັຕດີສົມຄວນ ຈຶ່ງຈະເປັນຜູ້ນຳໄດ້ ຈຶ່ງມີຄວາມ ກ້າວໜ້າໃນການນຳພາ ປະຊາຊົນ.

ໃນ 1984 ສຖານະການໃນສູນອົພະຍົບວິໄນ ໄດ້ເກີດມີບັນຫາຫລາຍຢ່າງ ຍ້ອນການປ່ຽນແປງ ດ້ານການເມືອງຂອງໄທ໌ຍ ທີ່ໄດ້ຕົກລົງກັບ ສປປລ ດ້ານຊາຍແດນໄທ໌ຍແລະລາວ. ຈຶ່ງມີການສະລັບສັບຊອ້ນຫລາຍຢ່າງເກີດຂຶ້ນ ພາໃຫ້ຊາວອົພະຍົບ ຫລາຍຄົນຕ້ອງໄດ້ອອກຈາກສູນ ໄປປະເທສທີ່ສາມ ດັ່ງນີ້ ທ່ານວ່າງເນັ້ງ ຈຶ່ງຕ້ອງອອກຈາກສູນອົພະຍົບ ໂດຽບໍ່ມີທາງເລືອກ. ເພາະໄທ໌ຍໄດ້ເປີດປະຕູ ໃຫ້ຄອມມູຍນິສຕ໌ເຂົ້າ ໄປພົວພັນຫລາຍຢ່າງຢູ່ໃນປະເທສໄທ໌ຍ.

**<u>ສູນອົພຍົບໄດ້ປິດລົງ</u>**

ສູນນ້ຳພອງ ພ້ອມກັບ ສູນໜອງໄຄ ຖືກປິດລົງ ປີ 1976 ໄດ້ຍ້າຍຊາວ ອົພຍົບ ໄປຢູ່ສູນວິໄນ. ສູນບ້ານວິໄນ ຖືກປິດລົງ. ໃນປີ 1992, ຍ້ອນບັນຫາ ການເມືອງ ລະຫວ່າງໄທ໌ຍແລະສປປລ(ລາວຄອມມູຍນິສຕ໌) ອົພະຍົບຊາວມົ້ງ ຫລາຍພັນຄົນ ໄດ້ຖືກຍ້າຍມາຢູ່ສູນ "ນາໂພ " ເພື່ອຕຽມກວດຮ່າງກາຍ ແລະ ປະກອບເອກ ກະສານເພື່ອຈະໄດ້ເດີນທາງໄປປະເທສທີ່ສາມ.

**<u>ໝາຍເຫດ</u>** ການປິດສູນວິໄນປີ 1992 ແມ່ນເກີດມາຈາກການເມືອງລະຫວ່າງຣາຊອານາຈັກໄທ໌ຍ ແລະ ສປປລ ຄືການຕໍ່ສູ້ລະຫວ່າງໄທ໌ຍແລະ ສປປລໃນ 1984 ສາມໝູ່ບ້ານຊາຍແດນໄທ໌ຍແລະລາວ. ໄທ໌ຍໄດ້ເສັຍສາມໝູ່ບ້ານນີ້ໃຫ້ ສ.ປ.ປ.ລ. ໃນ 1984. ໃນວັນທີ່ 12 ເດືອນທັນວາ (December) 1987 ແລະວັນທີ່ 01 ເດືອນມັງກອນ (January) 1988 ໄທ໌ຍແລະ ສ.ປ.ປ.ລ. ໄດ້ຕໍ່ສູ້ກັນ ທີ່ພູສອນໄຊຍລູ່ມເກົ້າ. ໄທ໌ຍເຂົ້າໄປໂຈມຕີຫລາຍຄັ້ງແຕ່ໄທ໌ຍບໍ່ສາມາດຈະເຮັດຫັຽງໄດ້ ໄທ໌ຍຈຶ່ງໄດ້ເກັບເອົາຊາວ"ມົ້ງ"ທີ່ຢູ່ໃນປະເທສໄທຍ໌ ແລະຊາວອົພະຍົບລາວສູງ "ມົ້ງ" ຫລາຍຄົນມາຈາກສູນອົພະຍົບໃນປະເທສໄທ໌ຍ ໄປຕໍ່ສູ້ຊ່ວຍ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຜົລສຸດທ້າຍ ກໍໄດ້ຮັບໄຊ໌ຍຊນະຢ່າງງາມ. ສປປລ ຕຽມຈະເຂົ້າໄປຍຶດພູລູ່ມເກົ້າຄືນ ແຕ່ໄທ໌ຍ ຂູ່ຈະໃຊ້ ຊາວ ອົພະຍົບໄປຊ່ວຍປ້ອງກັນ ສປປລ ຈຶ່ງຢຸດ ບໍ່ໂຈມຕີ ແຕ່ ຂໍເຈຣະຈາ ກັບໄທ໌ຍ ຢ່າງບໍ່ມີເງື່ອນໄຂ.

ການເຈຣະຈາ ແມ່ນໄດ້ຕົກລົງໃຫ້ປິດສູນອົພະຍົບໃນຣາຊອານາຈັກໄທ໌ຍທຸກບ່ອນ ດ້ວຍເຫຕນີ້ ຈຶ່ງໄດ້ປິດ ສູນວິໄນ ເພື່ອການເມືອງ. ຫລາຍພັນຄົນມົ້ງ ທີ່ບໍ່ຢາກໄປປະເທສທີ່ສາມ ກໍພາກັນໄປລີ້ຢູ່ວັດຖ້ຳກຣະບອກ ເພາະຢູ່ທີ່ນັ້ນ ມີຫລວງພໍ່ຄູບາ ເປັນຜູ້ໃຫ້ການດູແລ ແລະ ປົກປ້ອງ ຊາວອົພະຍົບ. ຫລວງພໍ່ໄດ້ເສັຍຊີວິດ ຈຶ່ງເກີດປິດສູນນີ້ ລົງຄືກັນໃນປີ 2006. ຊາວອົພຍົບຫລາຍພັນຄົນ ໄດ້ໄປປະເທສທີ່ສາມ ແຕ່ອົພຍົບ ສ່ວນໜຶ່ງ ກໍໄດ້ໂຕນໄປຫລີ້ຢູ່ບ້ານຫວ້ຍນ້ຳຂາວ ປີ 2007 ໄດ້ສຳຣວດຈຳນວນທັງໝົດ ແມ່ນເກືອບຮອດ ເຈັດພັນຄົນ (7,000 ຄົນ).

ປີ 2006 ແມ່ນປີ ທີ່ຄົນໄທ໌ຍໄດ້ຂຸດປ່າຊ້າຝັງສົບອົພະຍົບລາວສູງ “ມົ້ງ” ທີ່ເສັຍຊີວິດຢູ່ໃນສູນວັດຖ້ຳກຣະ ບອກ ແລະໄດ້ຝັງຢູ່ໃນທີ່ນັ້ນ. ຂຸດອອກທັງໝົດແມ່ນ 500 ກ່ວາສົບ ມີສົບແມ່ຍິງຄົນໜຶ່ງບໍ່ໄດ້ເນົ່າເປື່ອຍ ຍັງເກືອບຄືຕອນເອົາໄປຝັ່ງໃໝ່ໆ ພີ່ນ້ອງລາວສູງຫລາຍຄົນ ຊຶ່ງແມ່ນຍາຕພີ່ນ້ອງ ໄດ້ຕັ້ງຄຳຖາມວ່າໄທ໌ຍ ໄດ້ເອົາກະດູກຂອງຄົນຕາຍ ທີ່ໄດ້ຂຸດອອກມານັ້ນ ໄປໄວ້ບ່ອນໃດແລະຢູ່ໃສ່ກັນແທ້? ຊາວລາວສູງໃນ ສະຫະຣັຖ ກໍໄດ້ຕໍ່ວ່າຕໍ່ຂານ ແຕ່ກໍບໍ່ມີຜົລປະໂຍດຫັຽງຂຶ້ນ ເພາະເຮົາເປັນອົພະຍົບ ມາຂໍອາໄສຍບ້ານ ເພິ່ນເມືອງເພິ່ນ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 19.

# ເຫດການທີ່ຜ່ານມາແລະຄວາມເຫັນໃນອານາຄົດ

**<u>ໃນປີ 1981</u>** ໄດ້ມີການຈັດຕັ້ງແນວໂຮມປົດປ່ອຍຊາດຂຶ້ນ ໂດຍການນຳພາຂອງບຸກຄົນສຳຄັນດັ່ງຕໍ່ລົງໄປນີ້: ທ່ານອີແປງ ສູຣິຍະໄດ, ເຈົ້າສີສຸຂ ນະຈຳປາສັກດິ໌, ທ່ານໂງ່ນ ຊນະນິກອນ, ທ່ານຄຳພັນ ປັນຍາ, ທ່ານກຸປຣະສິດ ອາໄພຍ, ທ່ານທູມພັນ ໄຊຍະສິດ, ທ່ານພູມີ ໜໍສວັນ, ທ່ານວ່າງປາວ ແລະເຈົ້າພະຍາຫລວງອູທອງ ສຸວັນນະວົງ (ປະທານ).

ເຈົ້າສີສຸຂ ນະຈຳປາສັກດິ໌ ໄດ້ເສັຍຊີວິດດ້ວຍໂລກຫົວໃຈໃນປີ 1982 ທີ່ຣັຖກາລີຟອກເນັຍ ສະຫາຣັຖ ຄນະກັມມະການຈັດຕັ້ງນີ້ໄດ້ສົ່ງສານຫລາຍສະບັບໄປຮ້ອງຂໍໃຫ້ສະຫາຣັຖ ແລະ ສະຫະປະຊາຊາດ ຂໍໃຫ້ຊ່ວຍແກ້ໄຂບັນຫາຂອງລາວ ທີ່ຖືກແກວວຽດນາມເໜືອ ຄຸກຄາມ, ເຂັ່ນຂ້າປະຊາຊົນລາວ ທີ່ບໍ່ມີຄວາມຜິດ ຍຶດຜືນແຜ່ນດິນລາວເປັນຫົວເມືອງຂຶ້ນ ແຕ່ບໍ່ໄດ້ຜົລຫັຍງເລີຍ ເພາະນັກຂ່າວພາຍນອກເຂົ້າໄປຄົ້ນບໍ່ພົບຍ້ອນຄວາມຂີ້ຕົວະ ແລະແຜນການຫລອກລວງ ຂອງພວກພະເດັຈການຄອມມຸຍນິສຕ໌ ລາວແດງ ລູກນ້ອງ ວຽດ ຄ.ມ.ນ. ຄົນພາຍນອກໄປຄົ້ນຄ້ວເພື່ອຊອກຫາຂ່າວກໍພໍໄປຮອດແຕ່ໃນເມືອງ ບໍ່ໄດ້ໄປເຖິງໝູ່ບ້ານຕ່າງໆທີ່ຢູ່ເທີງພູເທີງເຂົາ ທີ່ຫ່າງໄກຕົວເມືອງ ເພາະຄວາມກັນດານ ບໍ່ປອດພັຍ ບໍ່ອານຸຍາດໃຫ້ຄົນຕ່າງດ້າວອອກໄປບ້ານນອກ. ແຕ່ປີ 2004 ຄນະຄົ້ນຫາຄວາມຈິງ (FFC, Fact Finding Commis sion) ໄດ້ເຂົ້າໄປໃນລາວແລະໄດ້ເອົາຮູບທີ່ໄປຖາຍ່ມານັ້ນ ອອກໃຫ້ທົ່ວໂລກເຫັນ ແຕ່ກໍເຮັດຫັຍງບໍ່ໄດ້ໃຫ້ຄອມມຸຍນິສຕ໌ ວຽດນາມເໜືອ.

## <u>ສລຸບຜົນການເສັຽຫາຍ</u>

ການສູນເສັຍຊີວິດປະຊາຊົນແລະກຳລັງທະຫາຣ ສໄມສົງຄາມອິນດູຈີນກັບຝຣັ່ງເສສໃນປີ 1945-1954 ກັບສະຫາຣັຖໃນປີ 1960-1975.

- ສະໄມໃນປີ 1945-1947 ລາວອິສຣະໄດ້ປຸກລະດົມປະຊາຊົນ ໃຫ້ຕໍ່ສູ້ກູ້ຊາດຈາກຝຣັ່ງເສສ ປະຊາຊົນລາວໄດ້ສູນເສັຍຊີວິດຫລາຍພັນຄົນ ສ່ວນຫລາຍແມ່ນເສັຍຢູ່ພາຄໃຕ້ ສວັນນະເຂດ, ແຂວງວຽງຈັນທນ໌, ຊຽງຂວາງ, ຫລວງພະບາງ ແລະຫົວພັນ ສະລູບແລ້ວ ທັງສອງຝ່າຍ (ລາວ/ຝຣັ່ງ ແລະ ລາວ/ວຽດ) ປະມານ 10 ພັນຄົນ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

- ສະໄມໃນປີ 1953-1954 ການຕໍ່ສູ້ ລະຫວ່າງຝ່າຍຝຣັ່ງເສສ ແລະ ວຽດມິນໄດ້ນຳການສູນເສັຍຊີວິດໃຫ້ປະຊາຊົນລາວແລະກຳລັງທະຫາຣຂອງລາວທັງໝົດປະມານ 30 ກວ່າພັນຄົນ ການສູນເສັຍຫລາຍແມ່ນ ຢູ່ແຂວງຜົ້ງສາລີ, ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງສວັນນະເຂດ ແລະ ປາກເຊ ຊຶ່ງວຽດມິນໄດ້ສົ່ງກຳລັງໄປໂຈມຕີຢ່າງໜັກ ຈຶ່ງພາໃຫ້ຝ່າຍຝຣັ່ງເສສຕ້ອງໃຊ້ກຳລັງຕາມລ່າໃຫ້ຖອຍກັບໄປ.
- ສໄມໃນປີ 1960, ກອງແລ ປະຕິວັດ ຣັຖປະຫາຣໃນ ນະຄອນວຽງຈັນທນ໌ ໄດ້ເຮັດໃຫ້ປະຊາຊົນ ແລະ ກຳລັງທະຫາຣ ສອງຝ່າຍຊຶ່ງ ແມ່ນລາວ ສ່ວນຫລາຍ ຕ້ອງໄດ້ສູນເສັຍຊີວິດໄປເປັນຈຳນວນຫລາຍຮ້ອຍຄົນ ຢູ່ນະຄອນວຽງຈັນ ແລະຢູ່ແຂວງຊຽງຂວາງ.
- ໃນປີ 1960 ນາຍພົນພູມີ ໜໍສວັນ ໄດ້ໄປປົດປ່ອຍ ນະຄອນວຽງຈັນທນ໌ ປະຊາຊົນ ແລະ ກຳລັງສອງຝ່າຍ ໄດ້ລົ້ມຫາຍຕາຍໄປເກືອບພັນຄົນ ລວມທັງປະຊາຊົນໃນນະຄອນວຽງຈັນທນ໌.

<u>**ສົງຄາມສະຫາຣັຖແລະວຽດນາມ ຄ.ມ.ນ. ໃນປີ 1960-1975**</u> ເພື່ອປ້ອງກັນການຂຍາຍຕົວຂອງຄອມມຸຍນິສໄປສູ່ເອເຊັຍຕາວັນອອກສ່ຽງໃຕ້ ໄດ້ນຳການສູນເສັຍຊີວິດ ມາສູ່ປະຊາຊົນລາວ ແລະກຳລັງທະຫາຣ ຕາມພາຄ ຕ່າງໆດັ່ງຕໍ່ໄປນີ້:

## <u>ທະຫາຣ ພາຄ 1</u>

ພາຍໃນ 10 ກ່ວາ ປີ ການສູນເສັຍຊີວິດປະຊາຊົນປະມານ 20 ພັນຄົນ ກຳລັງທະຫາຣປະມານ 25 ພັນຄົນ. ເສັຍພື້ນ ທີ່ໃຫ້ສັດຕຣູຄອມມຸຍນິສ ວຽດນາມເໜືອ 70 ເປີເຊັນໂດຽສະເພາະແມ່ນ ພາຄເໜືອ ແລະດ້ານຕາວັນອອກ ສຽງເໜືອຂອງພາຄ ຄື: ແຂວງພົ້ງສາລີ ເສັຍໝົດ 100 ເປີເຊັນ, ປະຊາຊົນລາວໃນ ພາຄ 1 ຫລາຍກ່ວາ 60 ເປີເຊັນ ນິຍົມ ຄ.ມ.ນ. ຄື ແຂວງອຸດົມໄຊຍ, ຫລວງນ້ຳທາ, ຫລວງພະບາງ ແຂວງໄຊຍະບຸຣີ ເພາະບໍ່ມີທາງເລືອກ ຕ້ອງອ່ຽງຊ້າຍເພື່ອໃຫ້ຢູ່ລອດ.

## <u>ທະຫາຣ ພາຄ 2</u>

ພາຍໃນ 10 ກວ່າປີຜ່ານມາ ການສູນເສັຍຊີວິດປະຊາຊົນ ປະມານ 100 ພັນຄົນ ຖືກສັດຕຣູ ຍິງຕາຍ, ຈັບໄປທໍຣະມານ, ຍົນຕ໌ ຖິ້ມລະເບີດໃສ່, ກຳລັງທະຫາຣ ປະມານ 50 ພັນຄົນສວ່ນຫລາຍແມ່ນທະຫາຣເຜົ່າລາວສູງ "ມົ້ງ" 70 ເປີເຊັນ ແລະ 30 ເປີເຊັນແມ່ນເຜົ່າລາວລຸ່ມ, ທະຫາຣໄທ໌ຍ ກໍມີຫລາຍພັນຄົນ. ເສັຍພື້ນທີ່ໄປໃຫ້ສັດຕູ 60 ເປີເຊັນ. ໃນປີ 1969, ແຂວງຫົວພັນ ແມ່ນສູນກາງຕັ້ງ ໜວ່ຍເຣດາ (Radar Station) ເພື່ອຊີ້ທາງໃຫ້ເຄື່ອງບິນສະຫາຣັຖ ໄປຖິ້ມລະເບີດໃສ່ຮາໂນ້ຍ ຈຶ່ງເຮັດໃຫ້ວຽດນາມເໜືອຕ້ອງໂຈມຕີຢ່າງໜັກ, ແຂວງຊຽງຂວາງ ມີຊາຍແດນຕິດກັບວຽດນາມເໜືອຫລາຍທີ່ສຸດ ຍັງໄກ້ກັບຮ່າໂນ້ຍ ອີກເໜືອໄປກວ່ານີ້ ແຂວງຫົວພັນແລະແຂວງຊຽງຂວາງ ເປັນບ່ອນຫລົ້ຊ້ອນຝຶກຝົນທະຫາຣວຽດນາມເໜືອ,



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເປັນສູນກາງຂອງລາວ ຄ.ມ.ນ. ເປັນດ່ານໜ້າປ້ອງກັນເມືອງເອກຂອງລາວ (ນະຄອນວຽງຈັນທ໌ນ ແລະ ຫລວງພຣະບາງ) ສັດຕຣູວຽດນາມເໜືອ ຈຶ່ງໄດ້ທຸ່ມເທກຳລັງໃສ່ ຫລາຍກ່ວາພາຄ ອື່ນ ໆ.

**ທະຫາຣ ພາຄ 3**

ພາຍໃນ 10 ກ່ວາປີ ການສູນເສັຍຊີວິດປະຊາຊົນ ຫລາຍກວ່າ 100 ພັນຄົນ ຖືກສັດຕຣູຂ້າ, ຈັບໄປທໍຣະມານຂ້າຖິ້ມ ແລະ ຍົນຕ໌ຖິ້ມລະເບີດໃສ່ເພາະເປັນເຂຕທີ່ຖືກລະເບີດໜັກກວ່າໝູ່ ແລະ ຫລາຍກວ່າ ທຸກບ່ອນໃນໂລກ ຕັ້ງແຕ່ສົງຄາມໂລກຄັ້ງທີ່ສອງ ເປັນຕົ້ນມາ ເສັຍກຳລັງທະຫາຣ ຫລາຍກວ່າ 50 ພັນຄົນ ແຂວງຄຳມ່ວນ, ແຂວງສວັນນະເຂດ, ແຂວງສາຣະວັນ ເສັຍໝົດແຂວງໃຫ້ສັດຕຣູ ຕັ້ງແຕ່ 1965, ເປັນຕົ້ນມາເພາະແມ່ນທາງໂຮຈິມິນຜ່ານ. ພື້ນທີ່ໄດ້ສູນເສັຍໃຫ້ ວຽດນາມຄອມມຸຍນິສຕ໌ 70 ເປີເຊັນ ເພາະກຳລັງ ວຽດ ນາມເໜືອ ໄດ້ປ້ອງກັນຢູ່ຢ່າງໜາແໜ້ນທີ່ສຸດ ຕາມເສັ້ນທາງ "ໂຮຈິມິນ ".

**ທະຫາຣ ພາຄ 4**

ພາຍໃນ 10 ກວ່າປີ ການສູນເສັຍປະຊາຊົນ ຫລາຍກວ່າ 60 ພັນຄົນ ທະຫາຣປະມານ 30 ກວ່າ ພັນຄົນ ເພາະ ວຽດນາມຄອມມຸຍນິຕ໌ ໄດ້ຍຶດໜ້າດິນໃນປະເທສລາວ ເປັນພື້ນທີ່ ຫລົ້ຊອ້ນ ເພື່ອຕຽມກຳລັງໄປໂຈມຕີວຽດນາມໃຕ້. ຄອມມຸຍນິສຕ໌ ຕ້ອງກວດລ້າງປະຊາຊົນລາວ ພາຄ 4 ບໍ່ໃຫ້ເຂົ້າໄປໄກ້ ໃນທີ່ຕັ້ງຂອງກຳລັງທະຫາຣ ວຽດນາມເໜືອ ແລະ ກອງໂຈນ ວຽດກົງ. ພາຄສີ່ ຕ້ອງຕໍ່ສູ້ຢ່າງໜັກເພື່ອປ້ອງກັນ ພື້ນທີ່ ຈຶ່ງໄດ້ສູນເສັຍກຳລັງທະຫາຣ ຢ່າງຫລວງຫລາຍ ໂດຽສະເພາະແມ່ນປ້ອງກັນພື້ນທີ່ ແຖວພູສູງ ພູພຽງໂບໂລເວັນ ພາຄຕາວັນອອກ ຫລາຍບ່ອນ ໃນ ພາຄ 4. ໄດ້ເສັຍພື້ນທີ່ດ້ານຕິດກັບວຽດນາມໃຕ້ ແລະ ຂເມນ ທັງໝົດໃຫ້ສັດຕຣູ ຈົນຕ້ອງໄດ້ຂໍ ກຳລັງຈາກປະເທສໄທ໌ຍໄປຊ່ວຍ ປ້ອງກັນ. ໄດ້ສູນເສັຍພື້ນທີ່ໃຫ້ ວຽດ ຄອມມຸຍນິສຕ໌ 60 ເປີເຊັນ. ແຂວງເຊໂດນ, ແຂວງອັດຕະປື ໄດ້ຕົກໃຫ້ສັດຕຣູທັງໝົດແຕ່ປີ 1965.

**ທະຫາຣ ພາຄ 5**

ເປັນພາຄທີ່ວູ້ນວາຍຫລາຍທີ່ສຸດ ມາຈາກດ້ານການເມືອງພາຍໃນ ແລະພາຍນອກ ເພາະເປັນທີ່ຕັ້ງຂອງສະຖານທູຕນາໆຊາຕ, ເປັນທີ່ຕັ້ງຂອງຣັຖບາລປະສົມສາມຝ່າຍ ບໍ່ມີການຕໍ່ສູ້ດ້ານອາວຸທຫລາຍ ແຕ່ມີການຕໍ່ສູ້ດ້ານການເມືອງຢ່າງຮູນແຮງ. ຍ້ອນການເມືອງຂອງສະຖານທູຕນາໆຊາຕ ຈຶ່ງມອງບໍ່ເຫັນຄວາມຂັດແຍ້ງລະຫວ່າງລາວສາມຝ່າຍ ເພາະສອງຝ່າຍ (ຊ້າຍແລະກາງ) ໃຊ້ເລ່ຫລ່ຽມໜີບເຕັງ ຝ່າຍຂວາ (ຝ່າຍວຽງຈັນທນ໌ ) ເມື່ອຂວາຕົກໄປ ກາງກໍພອຍຕົກໄປພ້ອມ ຈຶ່ງເຫຼືອແຕ່ພັຄຄອມມຸຍນິສຕ໌ ພັຄດຽວ. ໄດ້ໂອກາສ ໃຫ້ໄກສອນ ພົມວິຫານ ປະທານພັຄຄອມມຸຍນິສຕ໌ລາວ, ແລະເປັນສະມາຊິກພັຄຄອມມຸຍນິສຕ໌ອິນດູຈີນ ຕັ້ງແຕ່ 1944 ໄດ້ເຊັນສັນຍາ ມອບປະເທສລາວໃຫ້ວຽດນາມເໜືອຄອມມຸຍນິສຕ໌ ມາເປັນນາຍ ປົກຄອງລາວ 25 ປີ ແລະ ຕໍ່ໆໄປ ອ້າງວ່າແມ່ນ ສັນຍາ ມິຕະພາບ ລາວ/ວຽດນາມ ແຕ່ລາວແດງໝົດອຳນາດ ເພາະບໍ່ມີກຳລັງທະຫາຣ ມີແຕ່ທະຫາຣແກວປ້ອງກັນລາວ ພາຄ 5 ບໍ່ມີການ ສູນເສັຍປະຊາຊົນແລະກຳລັງທະຫາຣ ເຖີງມີ ກໍບໍ່ຫລາຍໃນເວລາຕໍ່ສູ້ກັນກັບຄອມມຸຍນິສຕ໌ ແຕ່ຫລັງຈາກພັຄ (ສປປລ) ຍຶດອຳນາຕ ພາຄ 5 ເປັນພາຄທີ່ສູນເສັຍປະຊາຊົນ ແລະກຳລັງທະຫາຣ ຫລາຍກວ່າໝູ່ ຝ່າຍກາງ ແລະ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຝ່າຍຂວາ ຕ້ອງຈົບຊີວິດລົງໃນສູນດັດສ້າງວຽງໄຊ ແຂວງຫົວພັນ ຢ່າງໜ້າເວດທະນາທີ່ສຸດ ປະມານ 40 ກວ່າ ພັນຄົນ. ໃນພາຄ 5 ແມ່ນແຕ່ເຈົ້ານາຍ ແມ່ນພາຄທີ່ໄດ້ມີປະຊາຊົນໂຕນໜີຂ້າມໄປຝັ່ງໄທ໌ຍຫລາຍກວ່າ ພາຄອື່ນໆ.

ການຍຶດອຳນາຕ ຂອງພັຄ ສປປລ ໃນປີ 1975 ໄດ້ເຮັດໃຫ້ປະຊາຊົນລາວສູງ "ເຜົ່າມົ້ງ" ຫລາຍກວ່າ 600,000 ຄົນຊື່ງຢູ່ຕາມແຂວງຕ່າງໆ ໃນພາກເໜືອ ປ່ຽນແປງເປັນດັ່ງນີ້ :

**<u>ປະມານ 200,000</u>** ພັນຄົນ ຕົກຄ້າງຢູ່ກອ້ງອຳນາຕຂອງພັກ ສປປລ ເພາະມີຈຳນວນນື່ງໄດ້ຕໍ່ສູ້ຮ່ວມກັບລາວແດງ ແລະ ວຽດນາມເໜືອ ແຕ່ສໄມ 1945 ເປັນຕົ້ນມາຈົນຮອດປີ 1975.

**<u>ຫລາຍກວ່າ 30,000</u>** ພັນຄົນ ໄດ້ເຂົ້າປ່າຕໍ່ສູ້ ເພາະເຂົ້າມາຮວມກັບ ສ.ປ.ປ.ລ ບໍ່ມີຄວາມປອດພັຍ ຍ້ອນໄດ້ຕໍ່ສູ້ກັບຝ່າຍຄອມມຸຍນິສຕ໌ ມາດົນນານ ຕັ້ງແຕ່ສໄມ1960 ຈົນເຖິງ 1975 ປະຈຸບັນ 2010 ພວກຕົກຢູ່ໃນປ່າອາດຍັງບໍ່ຮອດ 2 ພັນຄົນ ທີ່ຍັງມີຊີວິດຢູ່.

**<u>ປະມານ 100,000</u>** ພັນຄົນໄດ້ພຍາຍາມໜີໄປຝັ່ງປະເທສໄທຍ໌ ແຕ່ໄປບໍ່ຮອດໄດ້ສູນເສັຍຊີວິດຄື: ຕາຍຍ້ອນ ອຶດເຂົ້າ, ອຶດນ້ຳ, ຕາຍຍ້ອນຖືກຍິງ, ຕາຍຍ້ອນຖືກປູ້ນຈີ້, ຕາຍຍ້ອນຖືກຝົນເຫລືອງ, ຕາຍຍ້ອນໃນເວລາ ຂ້າມນ້ຳຂອງ ເຮືອຂ້ວມ ຫລືຖືກຍິງຢູ່ໃນກາງແມ່ນ້ຳຂອງ ແລະ ຕາຍຍ້ອນເປັນເຈັບໄຂ້ ພະຍາດໄຂ້ປ່າ ໃນລະຫວ່າງກາງທາງໃນປ່າ.



*<u>ຮູບທີ່ 196</u>. ແມ່ນການແຕ້ມຂອງ ນາງຮາລິນກາ ຫລວງປະເສີດ Mrs. Halinka Luangpraseut ພັລະຍາຂອງທ່ານຄຳຈິງຫລວງ ປຣະເສີດ. <u>ຄວາມໝາຍແມ່ນ</u> ສົງຄາມໃນລາວໄດ້ທຳລາຍ ຫົວໜ້າຄອບຄົວ "ຜູ້ຊາຍ" ຫລາຍທີ່ສຸດ ຈື່ງເຫລືອແຕ່ ແມ່ຍິງ, ຄືແມ່ແລະ ເດັກກຳພ້າ ທີ່ເປັນຕາ ໜ້າຮັກ, ໜ້າອີນດູ ແລະໂສກເສົ້າທີ່ສຸດ ຢູ່ທົ່ວທຸກໆພາຄ ທະ ຫາຣໃນ ພຣະຣາຊ ອານາຈັກລາວ.*

*( ຂໍຂອບໃຈນຳ ນາງຮາລິນກາ ທີ່ໄດ້ຂຽນເປັນ ຄວາມຊົງຈຳ ຂອງ ລາວເຮົາທຸກຄົນ.)*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

**<u>ປະມານ 200,000</u>** ພັນຄົນໄດ້ລອດຕາຍ ຂ້າມໄປຝັ່ງໄທ໌ຍ ແລະໄດ້ໄປ ຕັ້ງຖິ່ນຖານໃນປະເທສທີ່ສາມດັ່ງຕໍ່ລົງໄປນີ້:
**<u>ຫລາຍກວ່າ 140,000</u>** ພັນຄົນ ໄດ້ໄປຕັ້ງຖິ່ນຖານຢູ່ໃນ ສະຫາຣັຖ ອາເມຣິກາ;
**<u>ຫລາຍກວ່າ 60,000</u>** ພັນຄົນໄດ້ໄປຕັ້ງຖິ່ນຖານຢູ່ຫລາຍປະເທສເຊັ່ນ: ປະເທສຝຣັ່ງເສສ (**France)**, ກຽນນາ (French Guiana), ການາດາ (Canada), ໂອສເຕຣເລັຍ (Australia), ອັງກິດ (England) ແລະຫລາຍປະເທສໃນໂລກ. ປະຈຸບັນ 2008 ຍັງມີເຜົ່າລາວສູງ "ມົ້ງ" ຫລາຍພັນຄົນ ຍັງຕົກຢູ່ໃນປະເທສໄທ໌ຍ, ປີ 2009 ທະຫາຣໄທ໌ຍໄດ້ສົ່ງກັບໄປໃຫ້ ສປປລ ໝົດ.

## <u>ມົ້ງໃນອາເມຣິກາ</u>

ປະຈຸບັນ ອາດມີ ຮອດ 400,000 ຄົນ ຫລື ຫລາຍກວ່າ ເຕົ້າໂຮມກັນຢູ່ ກາລີຟອກເນັຽ (California), ມິເນໂຊຕາ (Minnesota), ວິສຄອນຊິນ (Wisconsin), ນອສໄຄໂຣໄລນາ (North Carolina), ເຊົ່າໄຄໂຣໄລນາ (South Carolina), ຢອກເຢັຍ (Georgia) and many others States in the USA.) ເພາະ ແຕ່ລະຣັຖ ທີ່ກ່າວມາເທີງນີ້ ມີປະຊາຊົນເຜົ່າລາວສູງ "ມົ້ງ" ເປັນຈຳນວນຫລາຍລົ້ນ ຄວນແລະ ກໍມີຄວາມກ້າວໜ້າທາງດ້ານການສຶກສາ, ການຫາຢູ່ຫາກິນຢູ່ກູ້ມຕົນເອງສ່ວນຫລາຍ ບໍ່ຄືສໄມຕອນມາເຖິງສະຫະຣັຖໃໝ່ໆ ທີ່ຕ້ອງການນາຍພາສາ, ຕ້ອງການຄວາມຊ່ວຍເຫລືອດ້ານປະຊາສົງເຄາະ, ຕ້ອງການຜູ້ນຳພາໄປຫາສະຖານທີ່ຕ່າງໆ ເພາະບໍ່ຮູ້ພາສາ ແລະ ອ່ານພາສາອັງກິດບໍ່ໄດ້.

## <u>ອົພະຍົບເຜົ່າລາວ</u>

ອາດມີຫລາຍກ່ວາ ຫົກແສນ (600,000) ຄົນ ໂດຽສະເພາະແມ່ນຂ້າຣາຊການຊັ້ນສູງ ພ້ອມຄອບຄົວ, ນັກສຶກສາ ພ້ອມດ້ວຍຄອບຄົວ, ນາຍທະຫາຣ ພ້ອມດ້ວຍຄອບຄົວ ໄດ້ໄປຕັ້ງຖິ່ນຖານໃນ ຫລາຍປະເທສຄື: ປະເທສຝຣັ່ງເສສ ເປັນຈຳນວນເກືອບເຖິງແສນຄົນ ແລະ ກໍຢາຍໄປທຸກປະເທສໃນຢູໂຣບ.
**ເຜົ່າລາວ** ຫລາຍກ່ວາ ສາມແສນ 300,000 ຄົນ ໂດຽສະເພາະແມ່ນ ຜູ້ທີ່ໄດ້ມີການສຶກສາ ຈາກສະຫາຣັຖພ້ອມຄອບຄົວ, ຜູ້ທີ່ໄດ້ເຮັດວຽກຮວ່ມກັບສະຫາຣັຖ ຍາມສົງຄາມຢູ່ໃນອິນດູຈີນ ແລະຄອບຄົວ; ນາຍທະຫາຣ, ພົນທະຫາຣ ຝ່າຍຂວາ ແລະ ຄອບຄົວ ໄດ້ໄປຕັ້ງຖິ່ນຖານຢູ່ໃນສະຫາຣັຖ ເຕົ້າ ໂຮມກັນສວ່ນຫລາຍແມ່ນຢູ່ ຣັຖແຕສຊັກ, ຣັຖກາລີຟອກເນັຍ, ຣັຖ ຢອກເຢັຍ, ຣັຖນອສໄຄໂຣໄລນາ, ຣັຖເຊົ່າໄຄໂຣໄລນາ ແລະ ຫລາຍໆຣັຖ ໃນສະຫາຣັຖ. ຄົນລາວສ່ວນຫລາຍແມ່ນຜູ້ທີ່ມີການສຶກສາ ບໍ່ມີບັນຫາດ້ານການມາຕັ້ງຖິ່ນຖານຊີວິດໃໝ່ ໃນປະເທສທີ່ສາມ. ນອກຈາກນີ້ ກໍມີອົພະຍົບເຜົ່າລາວ ບໍ່ຕ່ຳກວ່າແສນຄົນໄປຕົກ ໃນປະເທສຕ່າງໆ ເຫລົ່ານີ້ຄື: **ການາດາ, ໂອສເຕຣເລັຍ, ປະເທສໄທ໌ຍ, ຍີປູ່ນ ແລະ ພາຄຕາວັນອອກກາງ ສະເລັ່ຍແລ້ວ** ພວກທີ່ມາຢູ່ສະຫາຣັຖ ແມ່ນພວກທີ່ມີຄວາມກ້າວໜ້າ ດີກວ່າໝູ່ ເພາະ ລູກຫລານຫລາຍຄົນໄດ້ຜ່ານການສຶກສາສູງ ແລະເກືອບທຸກຄອບຄົວມີຖານະທີ່ດີສົມຄວນ ສຳລັບເຜົ່າລາວ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແຕ່ສຳຫລັບເຜົ່າລາວສູງ “ມົ້ງ” ແມ່ນພວກທີ່ ບໍ່ມີການສຶກສາສ່ວນຫລາຍ ຍ້ອນໄດ້ຕໍ່ສູ້ສົງຄາມຍາວນານ, ເປັນພວກທີ່ບໍ່ຄ່ອຍຮູ້ດ້ານການພັດທະນາຊີວິດ. ຄົນອາເມຣິກາຫລາຍຄົນ ຈຶ່ງໄດ້ເອີ້ນຊາວເຜົ່າລາວສູງ ເຜົ່າມົ້ງ ວ່າ: ”ຄົນສະໄມໂບຮານ” ເຜົ່າລາວສູງ ແລະເຜົ່າລາວໄດ້ເຂົ້າມາຢູ່ສະຫາຣັຖ 34 ປີ ເຕັມໆໃນ ປີ 2010 ໄດ້ສັງເກດເບິ່ງ ເຫັນວ່າອົພະຍົບລາວແລະເຜົ່າລາວສູງ ມີຄວາມກ້າວໜ້າ ໄປໄກສົມຄວນ ເພາະ ສອງເຜົ່າ ນີ້ມີນັກຊ່ຽວຊານຫລາຍຢ່າງ, ເປັນປະຊາຊົນທີ່ປັບຕົວໄດ້ໄວ ທັນກັບຊີວິດໃໝ່ຢູ່ໃນສະຫາຣັຖ ບໍ່ ຄືຕອນມາຮອດໃໝ່ ເຜົ່າລາວສູງແລະເຜົ່າລາວ ໄດ້ປະເຊີນກັບຄວາມຍູ້ງຍາກ ຫລາຍຢ່າງເຊັ່ນ:

ກ/ ມີຊາຍຄົນໜຶ່ງ ເຜົ່າລາວ ຂັບຣົຖຜ່ານໄຟແດງ ຖືກເຈົ້າໜ້າທີ່ຕຳຣວຈຈັບ ໄດ້ຖາມຊາຍຄົນລາວ ນັ້ນວ່າ ”ເຈົ້າ ບໍ່ມີຕາບໍ? ເປັນຫຍັງຈຶ່ງ ລ່ວງໄຟແດງ?” ຊາຍຄົນນັ້ນຕອບວ່າ ”ບໍ່ມີເງິນ ບໍ່ມີປະເທສ ຄິດ ຫລາຍ ຈຶ່ງລືມເຫັນ” ແປເປັນພາສາອາເມຣິກາ ວ່າ “No money, no country thinking thinking, no see!" ເຈົ້າໜ້າທີ່ຖາມວ່າ ເຮືອນຢູ່ໃສ? ແລ້ວກໍບອກຊາຍຄົນນັ້ນໃຫ້ຂຶ້ນຣົຖ ເຈົ້າໜ້າທີ່ໄດ້ພາໄປທີ່ເຮືອນ ໄດ້ຄົ້ນເບິ່ງເຮືອນ, ເບິ່ງຕູ້ເຢັນ, ເບິ່ງບ່ອນຢູ່ ພໍເຫັນໃນ ຕູ້ເຢັນ ມີນ້ຳນົມສອງປອງ ແລະ ມີແຕ່ນ້ຳແຂງ ເຈົ້າ ໜ້າ ທີ່ກໍໄດ້ບອກໃຫ້ຊາຍຄົນນັ້ນຕາມກົ້ນໄປຂຶ້ນຣົຖ, ຕົງໄປຍັງຫອ້ງການປະຊາສົງເຄາະ ເຈົ້າໜ້າທີ່ໄດ້ສັ່ງ ໃຫ້ຮອ້ງການປະຊາສົງເຄາະ ເບີກເງິນຝູດສະແຕມ ໃຫ້ (food stamps) ຫລາຍຮ້ອຍດອນລາ ແລ້ວພາ ໄປຊື້ເຄື່ອງເຕັມໃສ່ຣົຖ ສົ່ງໄປໃສ່ຕູ້ເຢັນ. ຊາຍຄົນນີ້ ເລົ່າວ່າ ຕອນຂຶ້ນຣົຖຕຳຣວຈ, ແມ່ນອຸກໃຈ ຈົນໃຈ ຈະຂາດ ເພາະຢ້ານຖືກຄຸກ ຢ້ານຖືກປັບໄໝ ບໍ່ມີເງິນຈະຈ່າຍ ແຕ່ ສຸດທ້າຍໄດ້ໄຫ້ວໄດ້ນົບເຈົ້າໜ້າທີ ຜູ້ມີ ໃຈບູນ ຮູ້ເຫັນໃຈຄົນອົພະຍົບຜູ້ທຸກຍາກ. ຊາຍຄົນນີ້ເລົ່າດ້ວຍຄວາມດີໃຈ ແຕ່ມີນ້ຳຕາໄຫລອອກມາຈາກ ຕາ ແມ່ນພີ່ນ້ອງເຜົ່າລາວທີ່ຢູ່ຣັຖ ມິເນໂຊຕາ.

ຂ/ ໃນປີ 1976 ມີຄອບຄົວເຜົ່າລາວສູງ “ມົ້ງ” ທີ່ຊາວຄຣິສຕຽນ ໄດ້ຕອ້ນມາເລີ່ມຊີວິດໃໝ່ໃນການ ຮຽນປູກຝັງແລະລ້ຽງສັຕ ກັບຄອບຄົວຊາວຄຣິສຕຽນອາເມຣິກັນ ເພາະມີຄວາມຕ້ອງການ ຄອບຄົວເຜົ່າ ລາວສູງ “ມົ້ງ” ເຂົ້າມາຊ່ວຍດ້ານການປູກຝັງ ເພາະໄດ້ສຶກສາແລະຮູ້ວ່າຄົນລາວສູງ ເປັນຊາວປູກຝັງ ທີ່ດີ ຈຶ່ງໄດ້ຕົກລົງຕ້ອນເອົາຊາວຄຣິສຕຽນລາວສູງມາຢູ່ສະຫາຣັຖ. ຄອບຄົວນີ້ມາເຖິງສະຫາຣັຖໃນທ້າຍເດືອນ ກູມພາ (February) 1976 ເປັນຍາມໜາວທີ່ສຸດໃນສະຫາຣັຖ ໂດຽສະເພາະແມ່ນພາກເໜືອໄອໂອວາ (Iowa). ພໍມາເຖິງໂບສຂອງຊາວຄຣິສຕຽນ ໄດ້ຕອ້ນຮັບຢ່າງດີ ໄດ້ພາໄປອາໄສຍ໌ຢູ່ເຮືອນຫລັງໜຶ່ງ ທີ່ ເປັນເຮືອນກໍ່ ແຕ່ຢູ່ຫ່າງໄກຈາກຕົວເມືອງໄປປະມານເກືອບໜຶ່ງໄມ ແລະຢູ່ໃກ້ໆໄຮ່ປູກສາລີ ຂອງຊາວ ນາ ອາເມຣິກັນ. ຜູ້ກຳກັບໂບສ ແມ່ນຜູ້ເບິ່ງແຍງຄອບຄົວທີ່ມາໃໝ່ນີ້ ໄດ້ນຳຄອບຄົວໄປໃສ່ເຮືອນຫລັງທີ່ໄດ້ ຕຽມໄວ້ຮຽບຮ້ອຍແລ້ວ. ພໍໄປເຖິງ ຜູ້ເບິ່ງແຍງກໍຟ້າວແດ່ ໄດ້ເປີດໄຟຟ້າ ໃຫ້ມີໄອຮອ້ນເອົາເຄື່ອງກິນໃສ່ຕູ້ ເຢັນ ເອົາກະແຈເຮືອນໃຫ້ແລ້ວ ກໍອອກໄປ ເພາະເປັນຕອນແລງຂອງວັນສຸກອີກດ້ວຍ.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຄອບຄົວເຜົ່າລາວສູງນີ້ບໍ່ຮູ້ວ່າດັງໄຟແບບໃດ, ເປີດນ້ຳແບບໃດ, ຈະແຕ່ງກິນແບບໃດ ແມ້ແຕ່ເປີດຕູ້ເຢັນກໍ່ບໍ່ເປັນ ຈຶ່ງໄດ້ນັ່ງກອດກັນ ລໍຖ້າໃຫ້ມີຄົນມາຢາມ ຫລືມີຜູ້ມາແປພາສາໃຫ້ ໄດ້ອຶດອາຫານມາ ຕັ້ງແຕ່ວັນສຸກຈົນເຖິງວັນອາທິດຕອນແລງ ຈຶ່ງມີພັນລະຍາຂອງຜູ້ກຳກັບໂບສ ມາພົບເຫັນຄອບຄົວນັ່ງກອດກັນ ເພາະຫິວເຂົ້າ ບໍ່ຮູ້ຈະເປີດໄຟ. ພັລຍາຂອງຜູ້ກຳກັບໂບສ ເປີດຕູ້ເຢັນ ເຄື່ອງກິນກໍ່ຄືເກົ່າ ຈຶ່ງເຂົ້າໃຈວ່າຄອບຄົວ ນີ້ຍັງບໍ່ຮູ້ຫັຍງ ຈຶ່ງໄດ້ຕິດຕໍ່ໄປຫາສູນກາງຕ້ອນຮັບຊາວອົພະຍົບ ໃຫ້ສົ່ງນາຍພາສາມາໃຫ້. ພໍນາຍພາສາມາເຖິງ ແມ່ນຄົນເຜົ່າລາວໄດ້ເວົ້າຢອກຜູ້ຊາຍຄົນນັ້ນວ່າ "*ໂຕໂງ່ໂພດ ມື້ແລງເຮົາຈະມາເອົາເມັຍໂຕໄປ.*" ຊາຍລາວສູງ ຜູ້ນີ້ກໍ່ເຫິງເມັຍ ຢ້ານຈະເປັນຄວາມຈິງ ບໍ່ມີຜູ້ໃດຊ່ວຍໄດ້ ພີ່ນ້ອງ ກໍ່ບໍ່ມີພາສາ ກໍ່ບໍ່ຮູ້ ເມື່ອຄົນກັບເມື່ອໝົດ ຕອນແລງມາ ຜົວກໍ່ສັ່ງເມັຍໃຫ້ເອົາເຊືອກມາມັດໃສ່ ກອ້ງຕະລ່າງ ເອົາໂຕະນ່ອຍໜຶ່ງມາຕັ້ງເປັນບ່ອນຢອງຕີນລູກສາມຄົນ ຜົວ, ເມັຍ ໄດ້ຂຶ້ນເທິງໂຕະ ມັດຄໍ ໝົດທຸກຄົນ ຜົວມັດເມັຍກ່ອນ ແລ້ວຕໍ່ໄປ ກໍ່ແມ່ນລູກ ຜົວກຳລັງໄປຜູກຄໍໃຫ້ລູກ ເມັຍກໍ່ໄດ້ລັກແກ້ເຊືອກອອກຈາກຄໍຂອງຕົນແລ້ວ ເອົາມີຈັບໄວ້ ຜົວໄດ້ມັດຄໍຜົວ ແລ້ວກໍ່ເຕະໂຕະອອກ ເມັຍໄດ້ປ່ອຍເຊືອກ ໄດ້ຊ່ວຍລູກໄດ້ໜຶ່ງຄົນ, ຊ່ວຍຜົວໄດ້ ແຕ່ຜົວເປັນລົມໄປ, ຊ່ວຍລູກອີກສອງຄົນບໍ່ໄດ້ ເພາະໝົດລົມຫາຍໃຈກ່ອນ. ຄໍຂອງຜົວກໍ່ພິກເຈັບຈົນບໍ່ຮູ້ເມື່ອຄືງ ເມັຍຈຶ່ງໄດ້ແລ່ນຜ່ານນ້ຳແຂງຕີນເປົ່າ ຍາມໜາວ ແລ່ນໄປຫາບ້ານຊາວອາເມຣິກັນທີ່ຢູ່ໄກ້ຄຽງ ນັ້ນໃຫ້ຊ່ວຍ ທັງຮອ້ງໄຫ້. ເມື່ອຊາວອາເມຣິກັນໄປເຖິງ ກໍ່ຊ່ວຍບໍ່ໄດ້ລູກສອງຄົນ ແຕ່ຊ່ວຍຊີວິດ ຜົວໄວ້ໄດ້ ຈຶ່ງນຳເຂົ້າໂຮງພະຍາບາລ. ແຕ່ນັ້ນມາ ຜົວມີສຸຂະພາບ ອ່ອນເອ ບໍ່ທູ່ນທ່ຽງ ຄືເກົ່າ.

ຊາວຄຣິສຕຽນອາເມຣິກັນ ຈຶ່ງໄດ້ສົ່ງຄອບຄົວນີ້ໄປຢູ່ໃນເມືອງ ບ່ອນທີ່ມີອົພະຍົບເຕົ້າໂຮມຢູ່ຫລາຍຄົນ ເພື່ອໃຫ້ພົ້ນຄວາມງຽບເຫງົາ. ນັບຕັ້ງແຕ່ນັ້ນມາ ຊາວຄຣິສຕຽນອາເມຣິກັນຈຶ່ງໄດ້ເຊົາ ບໍ່ຕອ້ນເອົາຄອບຄົວ ອົພະຍົບ ຊາວຄຣິສຕຽນ "ມົ້ງ" ອີກ. ຄອບຄົວນີ້ ແມ່ນຕອ້ນມາຈາກສູນພະຍາວ ທາງພາຄເໜືອຂອງປະເທສໄທ໌ຍ ຊຶ່ງແມ່ນອົພະຍົບທີ່ມາຈາກແຂວງໄຊຍະບູຣີ. ຈຸດປະສົງມີຢູ່ວ່າ ຊາວຄຣິສຕຽນຢາກຊ່ວຍຊາວ ອົພະຍົບຄຣິສຕຽນເຜົ່າລາວສູງ "ມົ້ງ" ໃຫ້ພົ້ນ ແລະໃຫ້ໄດ້ມາຕັ້ງຊີວິດໃໝ່ໃຫ້ມາຮູ້ພະເຈົ້າ ແຕ່ຄອບຄົວນີ້ໄດ້ຕັດສິນໃຈມາສະຫາຣັຖ ໂດຍບໍ່ຮູ້ ບໍ່ໄດ້ສຶກສາ ແລະ ກໍ່ບໍ່ແມ່ນຄົນຄຣິສຕຽນ ທີ່ໄດ້ຮຽນຮູ້ພະເຈົ້າມາແຕ່ກ່ອນ ເຫັນໝູ່ໄປແລ້ວ ກໍ່ຢາກໄປ ເພື່ອໃຫ້ພົ້ນຊີວິດ ອັນຈົນຕາແຈ ຢູ່ໃນ ສູນອົພະຍົບ.

ຄ/- ໃນປີ 1979 ຣັຖບາລສະຫາຣັຖອາເມຣິກາໄດ້ເອົາກ້ອນທຶນໃຫ້ໄປຕອ້ນເອົາອົພະຍົບ ຊຶ່ງແມ່ນຂ້າຣາຊການ ທະຫານ ຕຳຣວຈ ຝ່າຍວຽງຈັນທນ໌ ທີ່ໄດ້ຕໍ່ສູ້ ຄ.ມ.ນ. ວຽດນາມເໜືອຮ່ວມກັບ ສະຫາຣັຖໃນຍາມສົງຄາມອິນດູຈີນ ໄດ້ຕຽມການຕອ້ນຮັບແມ່ນໄປຕອ້ນເອົາອົພະຍົບ ຢູ່ໃນສູນວິໄນ (Ban Vinai Refugee Camp, Thailand) ບໍ່ແມ່ນສູນບ່ອນອື່ນ ເມື່ອຕຽມຣົຖຂົນສົ່ງ (Buses) ພ້ອມທຸກຢ່າງ ແຕ່ພໍໄປເຖິງສູນວິໄນ ຊາວອົພະຍົບຫລາຍຄົນໄດ້ປຸ່ງນໃຈ ບໍ່ຍອມມາສະຫາຣັຖ ຕາມ ຈຳນວນກຳນົດໄວ້ ໄດ້ເຮັດໃຫ້ໂຄງການຕ້ອນອົພະຍົບ ຕອ້ງປຸ່ງນໄປຕອ້ນເອົາອົພະຍົບຢູ່ສູນພາກເໜືອ ຂອງປະເທສໄທ໌ຍຄື: ສູນພະຍາວ ສູນນ່ານ ຕໍ່ໆໄປ ອົພະຍົບເຫລົ່ານີ້ແມ່ນພວກທີ່ຢູ່ຫ່າງໄກການສຶກ ສາ ບໍ່ມີໂອກາສໄດ້ເຂົ້າໄປ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນເມືອງ ສ່ວນຫລາຍບໍ່ໄດ້ຮູ້ແລະເຫັນຄວາມຈະເຣີນ. ນອກຈາກນີ້ ຍັງຢູ່ໃນເຂດ ທີ່ຝ່າຍ ຄ.ມ.ນ. ລາວ ຍຶ້ວຍິງ ກວດຂັນໄກ້ສິດ ບໍ່ໃຫ້ມີ ການຕິດຕໍ່ ຝ່າຍວຽງຈັນຫນ໌ ນອ້ຍຄົນທີ່ສຸດ ທີ່ໄດ້ມາ ຕໍ່ສູ້ ຄ.ມ.ນ. ຮ່ວມກັບຝ່າຍວຽງຈັນຫນ໌ ຍ້ອນສະພາບນີ້ ຄອບຄົວລາວສູງ "ມົ້ງ" ຈື່ງມີບັນຫາ ການປັບຕົວ ເຂົ້າກັບການປ່ຽນແປງໃນ ຊີວິດໃໝ່. ຈື່ງມີກະຕິກາ ການຕອ້ນເອົາຂ້າຣາຊການ, ຕໍາຣວຈ ແລະ ທະຫາຣ ທີ່ໄດ້ຮ່ວມຕໍ່ສູ້ສົງຄາມກັບສະຫາຣັຖ ໃນຍາມສົງຄາມອິນດູຈີນ ໂດຽສະເພາະ ແມ່ນຜູ້ທີ່ໄດ້ ອົພະຍົບ ມາຢູ່ປະເທສໄທ໌ຍ ສະໄມປີ 1975-1982. ເຖີງຢ່າງໃດກໍຕາມ ສະຫາຣັຖຍັງໄດ້ຕອ້ນມາຈົນເຖິງ ປີ 2006 ສ່ວນທີ່ຄ້າງຢູ່ວັດຖ້ຳກະບອກ ທີ່ປະເທສໄທຍ໌ເປັນລູ້ນສຸດທ້າຍ.

໑/- ຂ່າວເຫຕການທີ່ ສປປລ ໄດ້ປະຕິບັດກັບຝ່າຍວຽງຈັນຫນ໌, ການລ້າງຜານຊົນເຜົ່າ ລາວສູງ "ມົ້ງ" ທີ່ໂຕນເຂົ້າປ່າ, ຂ່າວຈາກບຸກຄົນຫລາຍຄົນຜູ້ທີ່ໄດ້ປະສົບກັບເຫຕການຕ່າງໆແລະໄດ້ບັນທຶກເຫຕການທີ່ຕົນເອງໄດ້ປະສົບຜ່ານມາ, ທີ່ ສປປລ ໄດ້ທາລູນຝ່າຍວຽງຈັນຫນ໌ ທີ່ສູນສັມມະນາດັດສ້າງ ຢູ່ວຽງໄຊ ແຂວງຫົວພັນ ແລະອື່ນໆອີກຫລາຍແຫ່ງ. ຈື່ງໄດ້ບັນທຶກ ໄວ້ຕາມເຫຕການທີ່ເກີດຂຶ້ນ ຜ່ານມາ ຫລາຍສິບປີ ຈື່ງສົມຄວນເກັບໄວ້ເປັນບົດຮຽນໃຫ້ລູ້ນຫລັງໄດ້ຮູ້ຕໍ່ໄປ ຍ້ອນວ່າລາວເປັນປະເທສທີ່ຢູ່ໃນ ລະຫວ່າງກາງຂອງຫລາຍປະເທສ ທີ່ຢາກໄປປະກອບກິຈຈະການຕ່າງໆຢູ່ໃນລາວ ເພາະປະຊາຊົນ ລາວ ກໍມີນ້ອຍຢູ່ບໍ່ທົ່ວເຖິງ ທຸກບ່ອນ, ຮັກສາຄວາມປອດພັຍ ກໍບໍ່ໄດ້ ຕາມຄວາມຕ້ອງກັນ ຈື່ງບໍ່ມີຄວາມປອດພັຍ ແລະມີແຕ່ບັນຫາຍູ້ງຍາກ ຕາມຊາຍແດນທີ່ຖືກລຸກລານ ຖືກຍຶດໄປ ລາວຈື່ງມີແຕ່ເສິກເສືອ ເໜືອໃຕ້ຕລອດຫລາຍປີທີ່ຜ່ານມາ ຈົນເຖິງປະຈຸບັນ ບໍ່ມີສິ້ນສຸດໃນອານາຄົດ ເສິກນີ້ຜ່ານໄປ ກໍມີເສິກໃໝ່ຂຶ້ນມາ ຍັງມີຫລາຍແນວທີ່ໄດ້ມອງເຫັນວ່າ ການຍາດແຍ່ງກັນຂອງປະເທສໄກ້ຄຽງ ຍັງບໍ່ໝົດງ່າຍໆ ເພາະໃຜໆກໍຢາກມາທຳກິຈການຢູ່ໃນລາວ ເມື່ອໄດ້ກິຈການແລ້ວກໍຢູ່ເລີຍ ບໍ່ຍອມອອກ ແລະອ້າງວ່າແມ່ນຄົນລາວ ເພາະການປອມແປງບັດປະຈຳຕົວຢູ່ໃນລາວມັນງ່າຍ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບ #197</u>. ນາຍພົນວ່າງປາວ ແລະ ທ່ານ ບິນບແລ ຮ່ວມກັນເຊັນເອກສານ ຈັກຕັ້ງ ສມາຄົມນັກລົບເກົ່າ SGU ຢູ່ຣັຖ ມິນເນໂຊຕາໃນປີ 2008*

## ຄວາມຄິດເຫັນສ່ວນຕົວຂອງ ອຣິຍະ ລີຟູງ

ຂ້າພະເຈົ້າໄດ້ຮັບກຽຕຈາກທ່ານວ່າງເປີ ໃຫ້ເປັນຜູ້ກວດແກ້ເອກສາຣບັນທຶກຄວາມຊົງຈຳຂອງທ່ານ. ເຫັນວ່າການບັນທຶກນີ້ ມາຈາກປະສົບການ ໃນພາຄສນາມ ທີ່ຄວບສອງເຫຕການປຣະວັຕສາສຕຣ໌ຂອງເຜົ່າມົ້ງ ໃນການຕໍ່ຕ້ານພັຍແດງຄອມມຸຍນິສຕ໌ຢູ່ເທິງພື້ນແຜ່ນດິນຂອງພຣະຣາຊອານາຈັກລາວ ຄື ໜຶ່ງ ຕໍ່ ສູ້ກຳລັງພວກຮຸກຮານວຽດມິນແອບແຝງຢູ່ນຳພວກລາວແດງ ໂດຍຮ່ວມໄມ້ຮ່ວມມືກັບຝຣັ່ງເສສ ແລະ ສອງຮ່ວມມືກັບສະຫະຣັຖອະເມຣິກາ ເພື່ອສະກັດກັ້ນພວກແກວເໜືອ ທີ່ລັກລອບຜ່ານດິນລາວ ລົງໄປ ເສີມກຳລັງພວກວຽດກົງ ໂຈມຕີປະເທສວຽດນາມເສຣີແລະກຳລັງຊ່ວຍເຫລືອສະຫະຣັຖ.

ຈະແມ່ນຍຸຄໜຶ່ງຫລືຍຸຄສອງກໍຕາມ ມັນຫາກຕັ້ງແມ່ນສັຕຣູໂຕດຽວກັນນັ້ນເອງ ກ່າວຄື ສະຫະພາບໂຊວຽດ ໄດ້ເລືອກເອົາຜູ້ນຳຄອມມຸຍນິສຕ໌ແກວເໜືອ ຊຶ່ງຖືກຈັດເຂົ້າຢູ່ໃນຈຳພວກທີ່ມີນິດສັຍ ຂູຊີຂີ້ສໍ້ ອະລັຊຊີໜ້າໄວ້ຫລັງ ຫລອກຂີ້ຕົວະ ໂລບມາກໂລພາ ເພື່ອຮັບວຽກງານ “ແຜ່ຂຍາຍລັທທິຄອມມຸຍນິສຕ໌” ໄປທົ່ວຂົງເຂຕອາຊີຕາວັນອອກສ່ຽງໃຕ້ ໂດຍອ້າງເອົາ “ສົງຄາມປົດປ່ອຍ ປົດແອກປະຊາຊົນ” ຈາກນັກ ລ່າຫົວເມືອງຂຶ້ນຝຣັ່ງ ແລ້ວຕໍ່ມາຈາກນັກລ່າຫົວເມືອງຂຶ້ນແບບໃໝ່ອະເມຣິກາ ມາປຸກຣະດົມປະຊາຊົນ ໂດຍເຊື່ອງບັງການຈະນຳເອົາ “ຣະບອບມະຫາອຸບາທວ໌ຄອມມຸຍນິສຕ໌” ມາປົກຄອງ ແທນທີ່ ຫລັງຈາກ ປົດ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ປ່ອຍແລ້ວ ບາດນັ້ນ ກໍແປງຮ່າງເປັນນັກເລງກິນເມືອງ ນັກຜນວກດິນແດນ ຕາມທາດແທ້ຂອງ ພວກເຂົາ.

ເມື່ອສົງຄາມໂລກໄດ້ຈົບສິ້ນໄປແລ້ວ ສົງຄາມເຢັນກໍເກີດຂຶ້ນມາແທນທີ່ ນັ້ນຄືການປະທະກັນຣະຫວ່າງ "ກຸ່ມປະເທສທຶນນິຍົມແລະກຸ່ມປະເທສຄອມມຸຍນິສຕ໌" ຫລື "ໂລກເສຣີນິຍົມແລະໂລກສັງຄົມນິຍົມ". ຜູ້ນຳຝ່າຍໂລກເສຣີນິຍົມກໍຄື ສະຫະຣັຖອະເມຣິກາ ສ່ວນຜູ້ນຳຝ່າຍໂລກສັງຄົມນິຍົມກໍຄື ສະຫະພາບ ໂຊວຽດ ທີ່ເຊື່ອຕາມອຸດົມການຄອມມຸຍນິສຕ໌ວ່າ ໃນສັງຄົມມະນຸສນີ້ ມີພຽງແຕ່ຊົນຊັ້ນກັມມາຊີພ ຜູ້ອອກແຮງງານຄືຊົນຊັ້ນກັມກຣ (ຄ້ອນເປັນເຄື່ອງໝາຍ) ແລະຊົນຊັ້ນຊາວໄຮ່ນາ (ກ່ຽວເປັນເຄື່ອງໝາຍ) ເທົ່ານັ້ນທີ່ສາມາຖສ້າງສວັນໃຫ້ມະນຸສໄດ້ ສ່ວນຊົນຊັ້ນອື່ນເຊັ່ນ ສັກດີນາ ເຈົ້າຂຸນມູນນາຍ ພຣະ ສົງຂ໌ອົງຄະເຈົ້າ ປັນຍາຊົນພໍ່ຄ້າຊາວຂາຍ ແລະຊົນຊັ້ນອື່ນໆ ນັ້ນ ເປັນຊົນຊັ້ນໄຮ້ປະໂຍຊນ໌ ຖືຊັ້ນ ວັນນະ ຈຳແນກເຊື້ອຊາຕ ລັງກຽດຜິວພັງ ເອົາປຽບຂົ່ມເຫັງ ແລະຂູດຮີດຊົນຊັ້ນກັມມາຊີພ ຜູ້ອອກແຮງ ງານ !

ຈະເຫັນໄດ້ວ່າ ໃນຣະຫວ່າງສົງຄາມເຢັນນີ້ ມັກຈະມີປະຊາຊົນປະເທສຄອມມຸຍນິສຕ໌ລັກໂຕນໜີອອກຈາກສວັນຂອງຊົນຊັ້ນກັມມາຊີພຜູ້ອອກແຮງງານ ເຂົ້າໄປລີ້ພັຍການເມືອງ ໃນປະເທສເສຣີ ໂດຍເອົາຊີວິຕສ່ຽງຕໍ່ພັຍອັນຕຣາຍຕ່າງໆເຂົ້າແລກປ່ຽນ ກັບຄຳວ່າ "ເສຣີພາພ" ເຊັ່ນການ: ລັກລອບຂ້າມກຳແພງ

ແບກແລັງ ຫລືກຳແພງແຫ່ງຄວາມອັບອາຍຫລືມ່ານເຫລັກ, ລັກລອບອອກຈາກຈີນແດງ ດ້ວຍການ ລອຍນ້ຳສູ່ແດນອິສຣະພາພຮົງກົງ, ລັກລອບອອກຈາກຄນະນັກກິລາ ນັກສິລປິນ ຄາວເດີນທາງອອກ ມາແຂ່ງຂັນ ເຂົ້າຮ່ວມງານມະຫະກັມຕ່າງໆ ຢູ່ໃນໂລກເສຣີ. ເພື່ອໜີອອກຈາກໝົ້ນາຮົກແດງ. ແຕ່ກົງກັນຂ້າມ ຊ້ຳພັດບໍ່ມີປະຊາຊົນຜູ້ໃດຂອງໂລກເສຣີ ເລືອກເອົາວິທີການແບບນີ້ ນອກຈາກຈຳພວກທີ່ມີຄະ ດີຕິດຕົວເທົ່ານັ້ນ.

ເມືອງລາວຂອງເຮົາໄດ້ເປັນດິນແດນຢູ່ພາຍໃຕ້ຄວາມອາຣັກຂາຂອງຝຣັ່ງເສສ ນັບຕັ້ງແຕ່ວັນທີ່ 3 ຕຸລາ 1893 ເປັນຕົ້ນໄປ, ຫລັງຈາກທີ່ເຄີຍໄດ້ເປັນ ປະເທສຣາຊຂອງສຍາມ ຕັ້ງແຕ່ປີ ຄ.ສ.1779 ເປັນຕົ້ນມາ, ໂດຍຖືກຜນວກໃຫ້ໂຮມເຂົ້າໃນອິນດູຈີນຝຣັ່ງເສສ ໃຫ້ເປັນປະເທສທີ່ 5 ຫລັງຈາກປະເທສ ໂກແຊງຊິນ ຊຶ່ງເປັນ ຫົວເມືອງຂຶ້ນປະເທສຕັງແກງ ປະເທສອານາມ ແລະປະເທສຂເມຣ ຊຶ່ງເປັນດິນແດນ ຢູ່ພາຍໃຕ້ຄວາມອາຣັກຂາຝຣັ່ງເສສທັງໝົດ ຂຶ້ນກັບທ່ານຜູ້ເຣັຈຣາຊການ ອິນດູຈີນຝຣັ່ງເສສ ມີທີ່ວ່າການ ຢູ່ກຸງຮາໂນຍ ຫລື ກຸງໄຊ່ງ່ອນ. ໃນດິນແດນຢູ່ພາຍໃຕ້ຄວາມອາຣັກຂາ ແມ່ນທ່ານຜູ້ສຳເຣັຈຣາຊການ ຫົວເມືອງ (Resident superieur) ເປັນຜູ້ປົກຄອງ. ສ່ວນໃນຫົວເມືອງຂຶ້ນນັ້ນ ແມ່ນທ່ານຜູ້ວ່າຣາຊການ (Gouver neur) ເປັນຜູ້ປົກຄອງ. ຝຣັ່ງເສສແບ່ງລາວອອກ ເປັນ 10 ແຂວງຄື: 1. ຫົວຂອງ ທີ່ວ່າ ການແຂວງ ຢູ່ບ້ານຫ້ວຍຊາຍ, 2. ຫລວງພຣະບາງ ທ.ວ.ກ.ຂ. ຢູ່ເມືອງ ຫລວງພຣະບາງ, 3. ພວນ ທ.ວ.ກ.ຂ. ຢູ່ເມືອງ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຊຽງຂວາງ, 4. ຫົວພັນ ທ.ວ.ກ.ຂ. ຢູ່ເມືອງຊຳເໜືອ, 5. ວຽງຈັນທນ໌ ທ.ວ.ກ.ຂ. ຢູ່ ເມືອງວຽງຈັນທນ໌, 6. ຄຳມ່ວນ ທ.ວ.ກ.ຂ. ຢູ່ເມືອງທ່າແຂກ, 7. ສວັນນະເຂດ ທ.ວ.ກ.ຂ. ຢູ່ ເມືອງ ສວັນນະເຂດ, 8. ສາຣະວັນ ທ.ວ.ກ.ຂ. ຢູ່ເມືອງສາຣະວັນ, 9 ຈຳປາສັກດິ໌, ທ.ວ.ກ.ຂ. ຢູ່ເມືອງປາກເຊ, 10. ອັດຕະປື ທ.ວ.ກ.ຂ. ຢູ່ ເມືອງໃໝ່. ມີທ່ານກອມມິສແສຣ໌ (Commissaire du gouvernement francais) ປະຈຳຢູ່ໃນແຕ່ລະແຂວງ. ນອກຈາກນີ້ຍັງມີ Deleguation (ກິ່ງແຂວງ) ຢູ່ ເມືອງສິງຫ໌ ສຳ ຫລັບແຂວງຫົວຂອງ, ຢູ່ເມືອງປາກລາຍ ສຳຫລັບແຂວງ ຫລວງພຣະບາງ ແລະ ຢູ່ເມືອງເຊໂປນ ສຳ ຫລັບແຂວງສວັນນະເຂດ ໂດຍມີທ່ານເດເລເກ (Delegue) ຫລື ເຈົ້າກິ່ງແຂວງ ທີ່ເປັນຜູ້ຕາງ ໜ້າທ່ານກອມມິສແສຣ໌ປະຈຳການຢູ່. ມີກໍຣະນີໜຶ່ງຕື່ມ ຄືຝຣັ່ງເສສ ໄດ້ຕັ້ງອານາເຂດດິນທີ່ ໕ ທະຫາຣ (V[eme] Territoire militaire) ໃສ່ເຂດຜົ້ງສາລີ ອີກ.

ໃນສມັຍເປັນປະເທສຣາຊຂອງສຍາມ ບໍ່ມີສະຖາບັນການສຶກສາ, ຄົນຢາກເລົ່າຮຽນ ຕ້ອງເຂົ້າບວຊ ຊຶ່ງນອກຈາກຮຽນທັມມະເປັນພື້ນຖານແລ້ວ ຍັງໄດ້ຮຽນ: ອັກສຣລາວ ໜັງສືທັມ ສັນສກຣິຕ ບາລີ ແຕ້ມຮູປຄວັດ ປຸງຢາພື້ນເມືອງ ເຮັດໂຄມປ່ອຍການປະສົມໝື້ ເຮັດບັ້ງໄຟດອກ ເຮັດກະທູບຍອ່າຍ ເປັນຕົ້ນ ມີແຕ່ເຊື້ອພຣະຣາຊວົງສ໌ ບາງພຣະອົງຄ໌ ທີ່ໄດ້ທຣົງສເດັຈໄປສຶກສາຢູ່ບາງກອກ.

ເມື່ອຝຣັ່ງເສສເຂົ້າມາປົກຄອງແລ້ວ ອຳນາຈການປົກຄອງໃໝ່ຈຶ່ງໄດ້ປຸກໂຮງຮຽນຂຶ້ນໃສ່ເມືອງໃຫຍ່, ຄອບຄົວຢູ່ຫ່າງໄກທີ່ຢາກໃຫ້ລູກເຕົ້າໄດ້ຮັບການສຶກສາ ແລະ ທີ່ມີຖານະທາງດ້ານສັງຄົມດີແດ່ຫລື ປານກາງກໍສົ່ງລູກຫລານເຂົ້າໄປຮຽນໜັງສືຢູ່ໃນເມືອງໂດຍອາສັຍຢູ່ນຳຍາຕິພີ່ນ້ອງ ຄົນຮັກແພງກັນ ເຈົ້ານາຍ ວັດວາອາຣາມເປັນຕົ້ນ.

ທີ່ກ່າວຫາການສຶກສານີ້ ກໍຍ້ອນວ່າ ໜຶ່ງໃນບັນດາອຸປສັກຂອງການພັທນາປະເທສ ແມ່ນຄວາມດ້ອຍການສຶກສານີ້ເອງ ຊຶ່ງໝາຍເຖິງການຂາດຂໍ້ມູລດ້ານວິຈັຍ ຍິ່ງຢູ່ໃນສົງຄາມຈິຕວິທຍາແລ້ວ ການໂຄສນາຊວນເຊື່ອ ແມ່ນຍົກໃຫ້ແກວຄອມມຸຍນິສຕ໌ໂລດ ດ້ວຍວ່າພວກເຂົາຕ້ອງຄຳສາບແຊ່ງຂອງໝົ້ນະຣີກຢູ່ແລ້ວ ປະກອບກັບໄດ້ຮັບການອົບຣົມພິເສສຕື່ມອີກ ຈາກສະຫະພາບໂຊວຽດ ຊຶ່ງກອງທັພແດງຂອງຕົນໄດ້ຈັບ ເອົາຜູ້ຊ່ຽວຊານດ້ານໂຄສນາຊວນເຊື່ອຂອງຣະບອບເຢັຍຣະມັນນາຊີ (ຂວາຈັດ) ໃຫ້ມາດັດແປງແກ້ໄຂໃຊ້ເປັນປະໂຍຊນ໌ ແກ່ຣະບອບຄອມມຸຍນິສຕ໌ (ຊ້າຍຈັດ). ຢ່າລືມວ່າຊົນຊາຕຍິວ ຫລື ຢິວ (Juif, Jew) ໃນທະວີປເອີຣົປຖືກດັບສູນລ້າງເຜົ່າພັນທ໌ ຈາກພວກເຢັຍຣະມັນນາຊີເຖິງ 6 ລ້ານຄົນ ກໍຍ້ອນວິທີການໂຄສະນາສ້າງຄວາມກຽດຊັງ ປັ້ນນ້ຳ ໃຫ້ເປັນຕ່ອນ ເຣື່ອງຄ່າສອກ ເອົາອອກຄ່າວາ ໃຫ້ແກ່ເຊື້ອຊາຕຍິວ.

ປະການໜຶ່ງອີກ 23 ປີກ່ອນທີ່ຝຣັ່ງເສສຈະມາປົກຄອງລາວຄືປີ 1870 ໄດ້ເກີດສົງຄາມຝຣັ່ງເສສ-ເຢັຍຣະມັນ (La guerre Franco-Prusse). ຕໍ່ມາໄດ້ 21 ປີຫລັງຈາກປົກຄອງລາວຄືປີ 1914 ກໍເກີດ ສົງຄາມ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໂລກຄັ້ງທີ່ 1. ສຸດທ້າຍ ຫລັງຈາກປົກຄອງລາວໄດ້ 46 ປີ ສົງຄາມໂລກຄັ້ງທີ່ 2 ກໍໄດ້ຣະເບີດ ຂຶ້ນຄືໃນປີ 1939. ໃນສາມເຫຕການນີ້ ປະເທສຝຣັ່ງເສສໄດ້ສູນເສັຍຊີວິຕທະຫາຣໄປເກືອບ ໔ ລ້ານເຄິ່ງ ຍັງບໍ່ທັນໄດ້ນັບໄລ່ມູລຄ່າ ການເສັຍຫາຍຕ່າງໆ ທາງດ້ານພົລເຮືອນ ແລະ ຊັພຍ໌ສົມບັຕ.

ພຽງແຕ່ສອງສາເຫຕ ຄື ບັນຫາດ້ອຍການສຶກສາຂອງຜູ້ຖືກອາຣັກຂາ ແລະບັນຫາເສິກສົງຄາມໃນປິຕຸພູມມາຕຸພູມຂອງຜູ້ອາຣັກຂາ ແຜນການສ້າງສາພັທນາໃນເມືອງລາວຈຶ່ງເກືອບຈະກ່າວໄດ້ວ່າບໍ່ມີຫຍັງ ຍິ່ງຫລັງຈາກການສິ້ນສຸດຂອງສົງຄາມໂລກຄັ້ງທີ່ 2 ລົງ ບາດແຜຍັງບໍ່ທັນຫາຍ ຝຣັ່ງເສສ ພຽງລຳພັງຕົນເອງກໍເຈີະກັບສົງຄາມອິນດູຈີນ ອັນມີໂລກຄອມມູນິສຕ໌ ປຸ້ມກັນໄປຊ່ວຍຊູພວກວຽດມິນ. ດັ່ງນັ້ນ ສ່ວນ ປະກອບໃນໂຄງຮ່າງເສຖກິຈຍຸຄໃໝ່ ເປັນຕົ້ນວ່າ ໂຮງຈັກໂຮງງານ ເພື່ອຮັບຮອງເອົາ ຜົລຜລິຕການ ກະເສຕກໍບໍ່ມີ ການກະເສຕເພື່ອປ້ອນອຸສາຫະກັມກໍບໍ່ມີ ເອີ້ນວ່າການປູກຝັງ ເພື່ອໄວ້ລ້ຽງຄອບຄົວ ຈະ ຖືກກວ່າປານນັ້ນກໍຍັງບໍ່ພຽງພໍ ຕ້ອງສັ່ງຊື້ຈາກປະເທສໄທຍ. ມາເຖິງສົງຄາມອິນດູຈີນບັ້ນທີ່ 2 ນີ້ ກໍພໍເຫັນວ່າຮູປຮ່າງເຣີ່ມປາກົຕຂຶ້ນມາ ແຕ່ມາຈາກນັກທຸຣະກິຈຕ່າງຊາຕ ທີ່ກ້າສ່ຽງ ຕໍ່ການລົງທຶນ ໃນປະ ເທສທີ່ບໍ່ມີຄວາມໝັ້ນທ່ຽງໃນດ້ານການເມືອງ ແລະທະນາຄາຣ ທີ່ກ້າໃຫ້ກູ້ຢືມເງິນທຶນ ໄປລົງຢູ່ໃນປະເທສ ທີ່ບໍ່ມີຄວາມປອດພັຍ.
ນອກຈາກຂາດເຂີນປັຈຈັຍການຜລິຕທີ່ໄດ້ກ່າວມາແລ້ວນັ້ນ ຄືມັນສມອງ ນັກລົງທຶນ ເງິນທຶນແລ້ວ ກໍແມ່ນແຮງງານ ຍ້ອນວ່າຕາມທາຕແທ້ແລ້ວ ໄທລາວບໍ່ມັກເປັນ"ຄູລີ" ແລະສຳຄັນທີ່ສຸດກໍຄື ຊາຍສກັນ ໄດ້ເຂົ້າຮັບໃຊ້ຊາຕ ເປັນຮົ້ວຂອງຊາຕ ປ້ອງກັນຊາຕຈາກການຮຸກຮານຂອງຄອມມູນິສຕ໌ ຈີນໃນປີ 1959 ຣັຖບານແຫ່ງພຣະຣາຊອານາຈັກລາວໄດ້ສຳເຣັຈການກໍ່ສ້າງ "ອະນຸສາວະຣີຍ໌ ນັກຣົບເກົ່າ ແລະຜູ້ປະສົບພັຍສົງຄາມ" ເພື່ອສະຖິຕໄວ້ເປັນການຣຳລຶກເຖິງຄວາມ ຮູ້ສຶກສຳນຶກໃນບຸນຄຸນ ແດ່ບັນດາທະຫາຣຫາຣກ້າທີ່ພາກັນສລະຊີພ ເອົາໂລຫິຕທາບທາພະສຸທາ ອັນຫວງແຫນຂອງບັນພະບຸຣຸສ ເພື່ອຮັກສາ ປົກປ້ອງໄວ້ຊຶ່ງຄວາມເປັນຊາຕລາວ. ມາດຽວນີ້ ລາວຄອມມູນິສຕ໌ໄດປ່ຽນ ຊື່ສະຖານທີ່ອັນສູງສົ່ງ ແຫ່ງ ນີ້ເປັນປະຕູໄຊຍ໌.

ພິຈາຣະນາເບິ່ງແລ້ວ ເງື່ອນໄຂຕ່າງໆ ສຳຫລັບການນຳເອົາຣະບອບຄອມມູນິສຕ໌ຜະເດັຈການຊົນ ຊັ້ນກັມມາຊີພເຂົ້າມາໃຊ້ໃນສັງຄົມລາວນັ້ນ ແມ່ນບໍ່ສອດຄ້ອງກັບຄວາມເປັນຈິງຈັກຢ່າງ ແຕ່ຫາກແມ່ນ ຣະບອບທາສຍຸຄໃໝ່ ທີ່ແກວຄອມມູນິສຕ໌ໃຊ້ລ່າມໂສ້ລ່າມຊີກປະຊາຊົນລາວທັງປະເທສ (ຫລັງຈາກ ທີ່ໄດ້ຂ້າພໍ່ຂ້າແມ່ ໄລ່ຍາຕິພີ່ນ້ອງຂອງພວກເຂົາເຈົ້າ ໜີອອກໄປແລ້ວ) ແລ້ວແຕ່ງຕັ້ງ ສະຫາຍຄຸມ ທາສຂຶ້ນຄືພັຄປະຊາຊົນປະຕິວັຕລາວ ທີ່ຮູ້ພຽງແຕ່ຕອດຫົວ ແລະຂົ່ມເຫັງເຕັງເຕັກ ພີ່ນ້ອງຮ່ວມ ສາຍເລືອດດຽວກັນຕາມສະຫາຍນາຍຢູ່ຮາໂນຍສັ່ງມາ. ປະຊາຊົນລາວແມ່ນປາກບໍ່ໄດ້ ໄອບໍ່ດັງ ມີສຽງພຽງນ້ອຍດຽວ ກໍຕູ່ຫາວ່າ ຕ້ານພັຄແລະຣັຖ. ຖືວ່າຕົວເອງສລາດ ສ່ອງໃສ ເອົາໄຊຍ໌ຊນະ ຈັກກະພັດອະເມຣິກາ ແລະ ປະຕິການຂາຍຊາຕໄດ້ ແຕ່ຕາມເຫຕຜົລບາງຢ່າງ ທາງດ້ານຍຸທສາສຕຣ໌ ແລ້ວ ສະຫະຣັຖເຫັນຄວາມຈຳເປັນ



All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຕ້ອງເຊັນສັນຍາຢຸດຍິງ ສົງຄາມວຽດນາມ ທີ່ຫ້ອງປະຊຸມປເລ່ແຢລ (Salle Pleyel) ປາຣີສ ລົງວັນທີ່ 27 ມະກະຣາ 1973 ຊຶ່ງ ໃນມາຕຣາ 20 ຂອງວັດທີ່ ກ ກໍບົ່ງເຖິງລາວ ແລະ ຂເມຣໄວ້ຢ່າງຈະແຈ້ງແລ້ວ ສະຫະຣັຖ ກໍຖອນທັງກຳລັງ ທັງງົບປະມານເປັນສ່ວນ ຫລາຍ ອອກຈາກກຳລັງເຮືອຮົບທີ່ 7 ໄປເສີມກຳລັງເຮືອຮົບທີ່ 6 ໃນທະເລເມດີແຕຣ໌ຣັນເນ່ ເພື່ອປ້ອງກັນ ບໍ່ນຳ້ມັນໃນພາຄຕາວັນອອກກາງ ຊຶ່ງປຽບເໝືອນເລືອດຂອງໂລກຕາວັນຕົກ ກ່ອນທີ່ສົງຄາມ Yom Kippur ຈະຣະເບີດເກີດຂຶ້ນແຕ່ວັນທີ່ 6 ຫາ 24 ຕຸລາ 1973.

ຜິດພາດປະການໃດໃນການກວດແກ້ຄວາມຊົງຈຳນີ້ ໂປຣດໄດ້ໃຫ້ອະໄພຍ໌ແກ່ຂ້າພະເຈົ້າດ້ວຍ. ຂໍຂອບໃຈມາລ່ວງໜ້າໄວ້ນະທີ່ນີ້. (ອ່ານຊີວະປະວັຕຂອງທ່ານອຣິຍະ ລີຟຸງ ຢູ່ໃນປະວັຕຂອງບຸກຄົນສຳຄັນ ໃນພາກທີ່ 20).

ບັນຫາເກີດຂຶ້ນກໍຍ້ອນ ປານ້ອຍ ຍ່ອມຕົກເປັນເຍື່ອຂອງປາໃຫ່ຍ ແຕ່ວ່າ ຢູ່ໃນທະເລ ປານ້ອຍກໍສລາດ ເມື່ອປາໃຫ່ຍເຂົ້າໄປຈະກິນປານ້ອຍ ພວກມັນກໍໂຮມກັນເປັນວົງມົນດຳ ເໝືອນພູເຂົາ ເພື່ອຫລອກປາໃຫຍ່ ໃຫ້ປາໃຫຍ່ເຫັນວ່າ ປານ້ອຍເປັນຕົວໃຫ່ຍກວ່າ ແລະປານ້ອຍກໍພະຍາຍາມ ຫລີກໜີໄປ ຈາກປາໃຫຍ່ ແຜນຫລອກນີ້ກໍໄດ້ຜົນ ເຮັດໃຫ້ປານ້ອຍ ລອດພົ້ນຄວາມເປັນເຫຍື່ອ.

ທ່ານ ດຣ. ຄຳໄພ ອະໄພ໌ຍ ໄດ້ຂຽນບົດຄວາມຂອງເພິ່ນວ່າ: ຄວາມຈິງໃນອາດີດແລະບັນຫາລາວໃນປະຈຸບັນ ລາວເຮົາ "ບໍ່ຄວນລືມ ຕົວເລຂ 75 ໃນພົງສາວະດານຂອງລາວ ທີ່ຜ່ານມາ ເປັນປີມະຫາອຸບາດ ແລະ ປີແຫ່ງຄວາມຫາຍຍະນະຂອງປະເທສຊາຕຂອງລາວທັງຊາຕ" ຍ້ອນການ ປ່ຽນຣະບອບປະຊາທິປະໄຕ ໃສ່ຣະບອບ ພະເດັຈການ ຂອງ ສ.ປ.ປ.ລ (ສາທາລະນະລັດ ປະຊາທິປະໄຕ ປະຕິວັດ ລາວ).

ການປ່ຽນແປງຂອງ ແຕ່ລະສະໄໝ ແຕ່ລະບອບການປົກຄອງ ກໍມີຈຸດຈົບ ບໍ່ແມ່ນຈະຢູ່ຄ້ຳຟ້າ ຄ້ຳດິນ ຕລອດໄປ ດັ່ງທີ່ພວກເຮົາໄດ້ເຫັນຜ່ານມາຄື: ສົງຄາມໄປຍຶດປະເທສອື່ນ ເປັນຫົວຂຶ້ນຂອງຕົນ (Colonization Era) ເພື່ອອຳນາຕແລະເສຖາກິດ ໄດ້ເກີດສົງຄາມໂລກຄັ້ງທີ່ສອງ ກໍໄດ້ຈົບລົງ ບໍ່ມີປະເທສໃດເປັນຫົວເມືອງຂຶ້ນອີກ. ລັທທິຄອມມຸຍນິສຕ໌ ຫລື ລັທທິພະເດັຈການ ກໍໄດ້ຈົບລົງ ຫລັງຈາກ ສົງຄາມອິນດູຈີນ ສະຫາຣັຖ/ວຽດນາມ ຄ.ມ.ນ. ຣັຊເຊັຍ ກໍປ່ຽນ, ຈີນແຜ່ນດິນໃຫ່ຍ ກໍປ່ຽນ ຍັງແຕ່ປະເທສນ້ອຍໆຄື ລາວ, ວຽດນາມ ບໍ່ດົນກໍຈະປ່ຽນຄືກັນ. ການປ່ຽນແປງ ທີ່ຜ່ານມາເຫລົ່ານີ້ ກໍມີແນວດີ ແລະແນວເສັຍ ສຳຫລັບແນວເສັຍນັ້ນ ຂ້າພະເຈົ້າຂໍບໍ່ກ່າວເຖິງ ເພາະມັນຜ່ານໄປແລ້ວ, ແຕ່ຈະໃຫ້ຄວາມຄິດເຫັນ ການປ່ຽນແປງໃນອານາຄົດດັ່ງນີ້:


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ແນ່ນອນ ວ່າໃນລະຍະໃກ້ໆນີ້ ປະເທສລາວຕ້ອງມີການປ່ຽນແປງ ຄື ປ່ຽນເປັນລູ້ນປະຊາຊົນໃໝ່ ລູ້ນທີ່ຮູ້ປາກຫລາຍພາສາ ມີຄວາມຮູ້ຫລາຍດ້ານ, ຮູ້ການຕິດຕໍ່ທົ່ວໂລກ ເພາະເມືອງລາວຈະກາຍເປັນສູນກາງທາງຜ່ານຂອງຫລາຍປະເທສໃນເອເຊັຍ ແລະເປັນສຖານທີ່ພັກຜ່ອນຢ່ອນໃຈຂອງໂລກ ໂດຽສະເພາະແມ່ນຊາວເອເຊັຽ. ຄົນລາວສໄມໃໝ່ ຈະແມ່ນລູ້ນລູກຊອດລາວ ທີ່ເກີດຈາກພາຍໃນປະເທສ ແລະ ລູກຊອດລາວ ທີ່ເກີດມາຈາກຕ່າງປະເທສ.

ສຖານະການໄດ້ປ່ຽນແປງ ຢູ່ໃນລາວ ປີ 1975 ຈຶ່ງເປັນໂອກາສໃຫ້ລາວໄດ້ຫລັງໄຫລໄປຮຽນ ການສຶກສາຢູ່ຕ່າງປະເທສຕາມລຳພັງ ຣັຖບາລລາວ ແມ່ນບໍ່ມີຄວາມສາມາຕ ຈະສົ່ງນັກສຶກສາລາວຫລາຍຂນາຕນີ້ໄປຮຽນຢູ່ຕ່າງປະເທສ. ລາວລູ້ນໃໝ່ທີ່ເກີດຢູ່ໃນປະເທສ ແລະນອກປະເທສເທົ່ານັ້ນ ທີ່ສົມຄວນທີ່ສຸດ ຈະເປັນຜູ້ນຳຂອງປະເທສລາວ ເພາະສະພາບໄດ້ເຂົ້າໄປສູ່ຍຸກໃໝ່ ຍຸກທີ່ສລາດ ເຫັນໄກ ມີແນວຄິດສູງ ຂອງສັຕະວັຕທີ່ 21.
*(ດັ່ງນີ້ ປັຈສິມມະວາຈາຂອງສເດັຈ ເຈົ້າສູພານຸວົງສ໌ ກ່ອນສິ້ນພຣະຊົນໃນປີ 1995 ຈຶ່ງໄດ້ສັ່ງວ່າ ການກ້າວເດີນໄປສູ່ທາງໃໝ່, ພິເສດສຸດແມ່ນ ຕ້ອງເດີນໄປຕາມແນວຄິດຂອງລູກຫລານ ທີ່ຢູ່ຕ່າງປະເທສ ຖ້າພວກເຈົ້າເຂົ້າໃຈສະພາບການບ້ານເມືອງດີ ແລະປະຕິບັດຕາມຄຳຮຽກຮອ້ງດັ່ງກ່າວ ພວກເຈົ້າຕ້ອງຢູ່ຢ່າງໝັ້ນຄົງ ແລະ ມີກຽດ.)*

ການປ່ຽນແປງຂອງໂລກກໍຈະປ່ຽນແປງໄປພອ້ມໆກັນ ແນ່ນອນວ່າໃນ ອານາຄົດ ສາທາລະນະລັຕ ປະຊາຊົນ ຈີນແຜ່ນດິນໃຫ່ຍ ຕ້ອງເປັນຣີ່ມຈອ້ງ ປົກປ້ອງເອເຊັຍ ດ້ວຍຄວາມກ້າວໜ້າດ້ານເສຖາກິຕ ແລະ ຈຳນວນປະຊາຊົນ ອັນມະຫາສານຂອງຈີນ ຮ່ວມກັບຣີ່ມຈອ້ງອັນໃຫ່ງຂອງສະຫາຣັຖ ທີ່ສົມຄວນປົກປ້ອງທົ່ວໄປໃນເອເຊັຍຕາວັນອອກສ່ຽງໃຕ້ ໄວ້ໃຫ້ເປັນຜືນແຜ່ນດິນ ທີ່ມີຫລາຍປະເທສ ໄດ້ມີເອກຣາຊມີເອກະພາບ ອັນສົມບູນ ຂອງແຕ່ລະປະເທສ ຕໍ່ໄປໃນອານາຄົຕ ເສິກເສືອເໜືອໃຕ້ ກໍຈະບໍ່ເປັນສິ່ງ ທີ່ຫວ່ງໄຍຂອງປະຊາຊົນໃນເອເຊັຍຕາວັນອອກສ່ຽງໃຕ້ ອີກຕໍ່ໃນຄັ້ງໜ້າ ຫາກຈີນແລະສະຫາຣັຖ ຍັງເປັນ ຣີ່ມຈອ້ງຮ່ວມກັນ ປົກປ້ອງໃນແຖວເອເຊັຍ ນີ້ຕໍ່ໄປ.

ນີ້ແມ່ນຄວາມຫວັງໃນການປ່ຽນແປງອານາຄົດຂອງລາວ ເພື່ອກ້າວໄປສູ່ສັຕະວັຕ ທີ່ 21 ຊຶ່ງເປັນສັຕະວັຕໃໝ່ກ້າວໜ້າດ້ານ “ເທກໂນໂລຍີ (The Era of Technology) ແລະເປັນຍຸກໃໝ່ ຍຸກທັນສະໄມກ້າວໜ້າ ຂອງປະເທສລາວ.


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາຄທີ່ 20.

# ຊີວະປະວັຕຂອງບຸກຄົນສຳຄັນ

## 1. ທ່ານເຈົ້າແຂວງສາຍຄຳ ສຸທະກະກຸມາຣ



ເຈົ້າສາຍຄຳ ສຸທະກະກຸມາຣ ເກີດປີ 1918 ເປັນລູກຊາຍຂອງສາທຸບາດ ເຈົ້າໄຊຍະວົງ ແລະ ໝ່ອມດວງດີ, ເຊື້ອສາຍ ຂອງເຈົ້າຜູ້ຄອງແຄ້ວນ "ພວນ" ມີອ້າຍນ້ອງພໍ່ແລະ ແມ່ດຽວກັນ 12 ຄົນ ຄື: ເຈົ້າເສືອ, ເຈົ້າອວ້ນ, ເຈົ້າເພັງ, ເຈົ້າດຳດວນ, ເຈົ້າສຸວັດ, ເຈົ້າສີທະວົງ, ເຈົ້າສີສຸພັນ, ເຈົ້າສາຍຄຳ, ເຈົ້າສິນ, ເຈົ້າສີໄພ, ເຈົ້າອາເຕົາ ແລະ ເຈົ້າແພງດີ.

ເຈົ້າສາຍຄຳໄປຮຽນໂຮງຮຽນມັທຍົມ ຢູ່ປະເທດວຽດນາມ ແລ້ວມາຮຽນຈົບ ໂຮງຮຽນກົດໝາຍ ຢູ່ນະຄອນ ວຽງຈັນ. ໃນປີ 1945 ເຈົ້າສາຍຄຳ ໄດ້ໄປເປັນນາຍກອງ ເພື່ອປົກຄອງປະຊາຊົນໃນແຖວ ໜອງແຮດຮ່ວມກັບຝຣັ່ງເສສ ຈຶ່ງພາໃຫ້ເຈົ້າສາຍຄຳ ຮູ້ ຄູ້ນເຄີຍ ແລະເຂົ້າໃຈຊົມຊົນເຜົ່າມົ້ງດີຂື້ນ.

ໃນວັນທີ່ 9 ເດືອນ ມີນາ March ປີ 1945 ຍີປຸ່ນເຂົ້າມາຍຶດເມືອງລາວ ເຈົ້າສາຍຄຳ ໄດ້ໄປລີ້ຊ່ອນຢູ່ພູຜາ ແຖວໜອງແຮດ ນຳຊາວເຜົ່າມົ້ງທີ່ມີ ຕາແສງ ຕູ້ບີ ລີຟຸງເປັນຜູ້ນຳ ແລະກໍມີຝຣັ່ງເສສ ຮ່ວມຢູ່ນຳດ້ວຍ. ຍ້ອນການເປັນຜູ້ນຳທີ່ຮັກ ແລະເຫັນໃຈປະຊາຊົນ ເຈົ້າສາຍຄຳ ຈຶ່ງໄດ້ລອດພົ້ນຈາກການທຳລາຍຂອງລາວອິສສຣະ ແລະຍີປຸ່ນ. ໃນໂອກາສດຽວກັນນີ້ ແມ່ນຊາຍໜູ່ມ ວ່າງປາວ ເປັນຜູ້ຫາຂ່າວ ແລະ ສົ່ງຈົດໝາຍໃຫ້ເຈົ້າສາຍຄຳ, ຕູ້ບີ ລີຟູ່ງ ແລະ ຝຣັ່ງເສສ ຢູ່ໃນແຖວໜອງແຮດ ແຂວງຊຽງຂວາງ.

ໃນວັນທີ່ 14 ເດືອນສິງຫາ August ປີ 1945 ຍີປຸ່ນໄດ້ເສັຍສົງຄາມ, ໄດ້ຖິ້ມອາວຸດຈຳນວນໜຶ່ງໃຫ້ວຽດມິນ, ລາວອິສສຣະ ແລະ ມົ້ງ ລໍ ລູກຂື້ນຕໍ່ສູ້ຝຣັ່ງເສສ ເພື່ອໃຫ້ພົ້ນຈາກການເປັນທົວເມືອງຂື້ນຂອງຝຣັ່ງເສສ ຝຣັ່ງເສສຈຶ່ງໄດ້ສົ່ງອາວຸດມາເພີ່ມ ໃຫ້ຝ່າຍທີ່ຮ່ວມກັບຝຣັ່ງເສສ ໄດ້ເຮັດໃຫ້ເຈົ້າສາຍຄຳມີໂອກາສຮ່ວມກັບ ຕູ້ບີລີຟຸງ ປຸກຣະດົມຊົນຊາຕຊົນເຜົ່າ ຕໍ່ສູ້ລາວອິສສຣະ ແລະ ວຽດມິນ.

ໃນວັນທີ່ 28 ເດືອນ ພຶສຈິກາ November ປີ 1945, ລາວອິສສຣະ ແລະ ວຽດມິນໄດ້ມາຍຶດຕົວເມືອງຊຽງຂວາງ ຈາກຝຣັ່ງເສສ ໄດ້ຢ່າງຮຽບຮ້ອຍ. ໃນວັນທີ່ 25 ເດືອນມັງກອນ January ປີ 1946 ເຈົ້າສາຍຄຳ ແລະ ຕູ້ບີ ລີຟູງ ໄດ້ນຳກຳລັງທະຫາຣຊົນຊາຕຊົນເຜົ່າລາວ ແມ່ນເຜົ່າມົ້ງສ່ວນຫລາຍ ເຂົ້າຍຶດເອົາຕົວເມືອງຊຽງຂວາງ ຈາກລາວອິສສຣະ ແລະ ວຽດມິນ ຕໍ່ມາບໍ່ນານ ເຈົ້າສາຍຄຳ ສຸທະກະກຸມາຣ ໄດ້ຖືກເລື່ອນຊັ້ນເປັນອຸປະຣາຊ ແລະ ໄດ້ຮັບໜ້າທີ່ເປັນເຈົ້າແຂວງຊຽງຂວາງ ແລະ ຕູ້ບີ ລີຟຸງ ໄດ້ຮັບໜ້າທີ່



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເປັນເຈົ້າເມືອງແມ້ວ "ມົ້ງ" ຜູ້ທຳອິດຢູ່ໃນຣາຊອານາຈັກລາວ. ດ້ວຍຄວາມຮ່ວມມືຂອງທ່ານທັ້ງສອງ, ເຈົ້າສາຍຄຳ ຈື່ງໄດ້ເປັນເຈົ້າແຂວງຊຽງຂວາງ ເຖີງປີ 1975.

ໃນວັນທີ່ 31 ເດືອນທັນວາ December ປີ 1960 ເຈົ້າສາຍຄຳ ແລະຂ້າຣາຊການ ໄດ້ແຕກອອກຈາກຊຽງຂວາງໄປຢູ່ສວັນນະເຂດ ແລະ ໄດ້ໄປຕັ້ງຫ້ອງການແຂວງຊົ່ວຄາວຢູ່ທີ່ນັ້ນ ແລະໄດ້ຮ່ວມມືກັບຣັຖບາລປາບຣັຖະປະຫາຣກອງແລ ຈົນເຖີງປີ 1961. ແມ່ນໂອກາສທີ່ ເຈົ້າແຂວງສາຍຄຳເປັນຜູ້ຮູ້ທ່ານພັນຕຣີ ວ່າງປາວຢ່າງດີ ໄດ້ສເນີໃຫ້ນາຍພົນ ພູມີ ໜໍ່ສວັນ ແລະ ສະເດັຈເຈົ້າ ບູນອູ້ມ ນະຈຳປາສັກ ຕັດສິນໃຈເລືອກເອົາພັນຕຣີ ວ່າງປາວ ເປັນຜູ້ກຳຝ່າຍທະຫາຣໃນແຂວງຊຽງຂວາງ.

ໃນປີ 1962 ທ່ານເຈົ້າແຂວງສາຍຄຳ ໄດ້ຮວ່ມມືກັບທ່ານ ພ.ອ ວ່າງປາວ ໄດ້ຂໍຮອ້ງໃຫ້ມີ ທະຫາຣພາຄ 2 ຈາກສະເດັຈເຈົ້າບູນອູ້ມນະຈຳປາສັກ ແລະ ນາຍພົນພູມີ ໜໍ່ສວັນ. ໃນປີດຽວກັນນັ້ນ ທ່ານເຈົ້າແຂວງສາຍຄຳ ໄດ້ຍ້າຍຈາກສວັນນະເຂດ ມາຕັ້ງຫ້ອງການແຂວງຊຽງຂວາງແນວຫລັງ (OEA) ຢູ່ຂ້າງກະຊວງມະຫາໄທ ທີ່ນະຄອນວຽງຈັນທນ໌ຈົນເຖີງປີ 1965. ໃນໂອກາສນີ້ ມີຫລາຍແນວປັ່ນປ່ວນຢູ່ໃນນະຄອນວຽງຈັນທນ໌ ເຈົ້າແຂວງສາຍຄຳ ເປັນຜູ້ຕາງໜ້າປະຊາຊົນໃນເຂດທະຫາຣພາຄ 2 ເພື່ອໄກ່ເກັ່ຍໃຫ້ມີຄວາມເຂົ້າໃຈ ລະຫວ່າງ ຣັຖບາລ ເປັນກາງ "ສາມເຈົ້າລາວ" ກັບນາຍພົນ ວ່າງປາວ ຕລອດມາ.

ໃນປີ 1965 ທ່ານນາຍພົນວ່າງປາວໄດ້ສ້າງໂຮງການແຂວງຢູ່ທີ່ ຊຳທອງສຳເຣັດ ທ່ານເຈົ້າແຂວງສາຍຄຳ ຈື່ງໄດ້ຍ້າຍຫອ້ງການແນວຫລັງ ຈາກວຽງຈັນທນ໌ ມາໃສ່ຊຳທອງ. ປີດຽວກັນນີ້ ນາຍພົນ ກຸປະສິດອາໄພ໌ງ ໄດ້ເຮັດຣັຖະປະຫາຣ ໃລ່ນາຍພົນພູມີ ໜໍ່ສະວັນ ອອກຈາກໜ້າທີ່ການ. ນາຍພົນວ່າງປາວ ໄດ້ຕຶກລົງຕຽມຈະເຂົ້າໄປຊ່ວຍນາຍພົນພູມີ ໜໍ່ສວັນ ແຕ່ເຈົ້າແຂວງສາຍຄຳ ແລະ ສະຫາຣັຖບໍ່ເຫັນດີ ຈື່ງໄດ້ຢຸດຕິລົງ.

ໃນປີ 1966 ທ່ານນາຍພົນຕຣີວ່າງປາວ ໄດ້ຮັບບາດເຈັບໄດ້ໄປໂຮງໝໍຢູ່ຕ່າງປະເທສ ກໍເກີດມີບັນຫາເຂົ້າໃຈຜິດກັນລະຫວ່າງ ເສັງລີ ແລະ ເສັງວ່າງ ບັນຫານີ້ ກໍແມ່ນທ່ານເຈົ້າແຂວງ ສາຍຄຳ ແລະທ່ານ ພຣະຍາ ຕູ້ບີ ລີຟຸງ ເປັນຄົນຮູ້ຈັກກັນດີ ເປັນຜູ້ແກ້ໄຂ ບັນຫານີ້ຈື່ງໄດ້ໝົດໄປ.

ໃນປີ 1969 ວຽດນາມເໜືອໄດ້ໂຈມຕີຊຳທອງແຕກ ທ່ານເຈົ້າແຂວງສາຍຄຳໄດ້ຍ້າຍໄປຢູ່ວຽງຈັນທນ໌ ຊົ່ວຄາວ. ທ້າຍປີ 1969 ຈື່ງໄດ້ຍ້າຍຫອ້ງການມາຕັ້ງຢູ່ ນາຊູ ບ້ານຊອັນ. ທ່ານເຈົ້າແຂວງສາຍຄຳໄດ້ທ່ຽວເບິ່ງປະຊາຊົນ ທີ່ໄດ້ອົພະຍົບໄປຢູ່ຖິ່ນຕ່າງໆ ຮວ່ມກັບຢູເສດ USAID ເພື່ອໃຫ້ໄດ້ຮັບການຊ່ວຍເຫລືອ ເບິ່ງແຍງໃຫ້ດີ ແລະ ທ່ານໄດ້ເປັນທີ່ປືກສາຂອງທ່ານນາຍພົນຕຣີ ວ່າງປາວ ຢ່າງດີ ຕລອດມາ.

ໃນປີ 1973 ຫາ 1975 ທ່ານເຈົ້າແຂວງສາຍຄຳ ແລະ ທ່ານນາຍພົນວ່າງປາວ ພະຍາຍາມໄປທຸກຈຸດທີ່ມີປະຊາຊົນຊຽງຂວາງ ເພື່ອໄດ້ອະທິບາຍ ການປັບປູງຕ່າງໆ ແລະ ການຫັນປ່ຽນຈາກສົງຄາມມາໃສ່ການປັບປູງແລະການພັທະນາ. ທ່ານທັ້ງສອງບໍ່ໄດ້ມີໂອກາສພັກຜອ່ນ ແລະ ນຳພາຄອບຄົວຂອງຕົນເລີຍທຸກຢ່າງແມ່ນເສັຍສະລະໃຫ້ປະຊາຊົນທັ້ງໝົດ. ສົມຄວນໃຫ້ລາວເຮົາທຸກຄົນ ເບິ່ງເພິ່ນທັ້ງສອງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເປັນແບບຢ່າງ ແລະຄວນຈາລຶກບູນຄຸນຂອງເພິ່ນທັ້ງສອງຕລອດໄປ. ສໄມນີ້ ນ້ອຍຄົນທີ່ສຸດ ທີ່ຈະປະຕິບັຕໜ້າທີ່ຂອງຕົນແກ່ປະຊາຊົນໄດ້ຄືທ່ານທັ້ງສອງອີກແລ້ວ.

ໃນວັນທີ່ 14 ເດືອນພຶດສະພາ (May) 1975 ເຈົ້າແຂວງສາຍຄຳໄດ້ອົພະຍົບໄປ ນ້ຳພອງ ປະເທສໄທ໌ຍແລ້ວ ໃນປີ 1976 ໄດ້ອົພະຍົບໄປຢູ່ປະເທສຝຣັ່ງເສສ ທ່ານໄດ້ເຖິງແກ່ກັມ ຢູ່ທີ່ແປກປີຍາງ (Perpignan, France) ໃນວັນທີ່ 5 ເດືອນທັນວາ (December) ປີ 1977.

ດ້ານຄອບຄົວ ໃນປີ 1948 ທ່ານເຈົ້າແຂວງສາຍຄຳ ສຸທະກະກຸມາຣ ໄດ້ແຕ່ງງານກັນກັບນາງແກ້ວ ອຸດອນ ເຊື້ອສາຍສວັນນະເຂຕ ແລະ ມີລູກດ້ວຍກັນ 4 ຄົນ ຄື: ສຸດາຈັນ, ມຸກດາກອນ, ນິລະມົນ, ແລະລັດດາວັນ. ນາງແກ້ວ ອຸດອນ ໄດ້ເສັຍຊີວິດຍ້ອນ ອຸປະຕິເຫຕ ຍົນຕົກຢູ່ເດີນຍົນ "ເຊໂນ Seno" ທີ່ສວັນນະເຂຕໃນວັນທີ່ 25 ເດືອນພຶສຈິກາ November ປີ 1968.

## 2. ພຣະຍາດຳຣົງຣິທິໄກ ຕູ້ບີ ລີຝຸງ



ທ່ານເກີດວັນທີ່ 13 ສິງຫາ August 1919 ທີ່ບ້ານພັກແຄະ ຕາແສງພັກບູນ ກອງໝອງແຮດ ເມືອງຄຳ ແຂວງ ຊຽງຂວາງ, ເປັນບຸຕຂອງທ່ານ ລີຝຸງ ແລະນາງ ລໍ ໄມ (ລູກສາວຂອງໄກຕົງ ລໍ ເບລັ່ຍຢ້າວ). ເວລາທ່ານຕູ້ບີ ມີອາຍຸແປດຂວບ ພໍ່ໄດ້ຈ້າງນາຍຄຣູຄຳພັ້ນໄປສອນໜັງສືຢູ່ທີ່ບ້ານ.

ໃນປີ 1929 ເຂົ້າໂຮງຮຽນປະຖົມບໍຣິບູນ ຢູ່ຊຽງຂວາງ ແລ້ວໄປຮຽນຕໍ່ທີ່ໂຮງຮຽນ ມັທຍົມປາວີ ທີ່ນະຄອນວຽງ ຈັນທນ໌, ແຕ່ບໍ່ຖືກອາກາສໃນເມືອງ ຈຶ່ງໄດ້ກັບຄືນຊຽງຂວາງເພື່ອປົວພະຍາທ. ເມື່ອຫາຍປ່ວຍ ແລ້ວ, ໄດ້ໄປຮຽນຕໍ່ທີ່ມັທຍົມເມືອງວິ້ນ ວຽດນາມກາງ ສີ່ປີຈຶ່ງໄດ້ກັບຄືນບ້ານ. ທ່ານຕູ້ບີ ລີຝຸງ ຮູ້ຈັກອ່ານ ຂຽນພາສາລາວ, ຝຣັ່ງ,ໄທຍ ທັ້ງແລະວຽດນາມ.

ໃນປີ 1939 ທ່ານຕູ້ບີລີຝຸງໄດ້ຖືກແຕ່ງຕັ້ງເປັນຕາແສງແກ້ງຄວາຍ. ໃນວັນທີ່ 14 ສິງຫາ 1945 ກອງທະ ຫາຣຍີປຸ່ນໄດ້ເຂົ້າຍຶດຄອງປະເທສລາວ, ຕູ້ບີ ລີຝຸງ ໄດ້ນຳພາຝຣັ່ງ ແລະເຈົ້າສາຍຄຳໄປລີ້ຊ້ອນຢູ່ໃນປ່າ. ຫລັງຈາກຍີປຸ່ນໄດ້ເສັຍສົງຄາມ ຕູ້ບີ ຈຶ່ງໄດ້ ເລື່ອນຊັ້ນຂຶ້ນເປັນນາຍກອງຊັ້ນ 4 ແລະເປັນນາຍກອງໝອງແຮດແທນໜ້າທີ່ເຈົ້າສາຍຄຳ ທີ່ໄດ້ໄປຮ່ວມງານໄກ້ສິດກັບຝຣັ່ງເສສ ເພາະລາວອິສຣະ ປະສົມວຽດມິນ ໄດ້ເຄື່ອນໄຫວທຳການສູ້ຮົບກັບຝຣັ່ງເສສ, ເພື່ອກອບກູ້ເອົາເອກຣາຊ.

ໃນວັນທີ່ 28 ສິງຫາ 1946 ໄດ້ເລື່ອນຊັ້ນເປັນອຸປຣາດຊັ້ນ 1.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນວັນທີ່ 18 ກໍຣະກະດາ 1947 ໄດ້ຖືກເລື່ອນຊັ້ນເປັນເຈົ້າເມືອງຜູ້ທໍາອິດຂອງຊົນຊົນເຜົ່າລາວສູງ "ມົ້ງ" ທີ່ຫາກໍ່ຖືກຈັດແຕ່ງຕັ້ງ ຂື້ນໃນແຂວງຊຽງຂວາງ.

ໃນວັນທີ່ 1 ພຶສຈິກາ 1949 ໄດ້ຮັບຕໍາແໜ່ງ ຮອງເຈົ້າແຂວງ ພະແນກປົກຄອງຊຸມຊົນ ເຜົ່າມົ້ງໃນແຂວງຊຽງຂວາງ ແລ້ວ ພຣະບາທສົມເດັຈພຣະເຈົ້າມະຫາຊີວິຕສຣີສວ່າງວົງສ໌ ທຣົງພຣະຣາຊທານ ນາມຍົສຂຸນນາງຊັ້ນພຣະຍາ ເປັນ ພຣະຍາດໍາຣົງຣິທິໄກ *(ແປວ່າ: ພຣະຍາຜູ້ຮັກສາໄວ້ຊຶ່ງຣິທເດຊ ແລະອໍານາຈອັນສັກດິ໌ສິທທິ໌ ທີ່ສູງສິ່ງ)* ແລະພຣະຣາຊທານອິສຣິຍາພຣເປັນຄ່າບໍາເໜັຈ ແລະໄດ້ຮັບຫລຽນ ອິສຣິຍາພຣພິເສສຫລາຍ ອັນຈາກຝຣັ່ງເສສ ແລະ ພຣະຣາຊອານາຈັກລາວ.

ພຣະຍາດໍາຣົງຣິທິໄກ ມີເມັຍສາມຄົນຊື່: ນາງຢົ້ວ Ntsuab, ນາງຊົງ Ntxhoo ແລະ ນາງເຊັຍ Xia.

- ລູກຊາຍມີ ຄື: ຕູ້ລົງ, ຕູ້ຊົວ, ຕູ້ຊາ, ຕູ້ວື, ເລັ່ງເກົ້າ, ຕູ້ຫລື, ຕູ້ປາວ,
- ລູກຍິງ ມີຄື: ເຊັຍ, ເກົ້າລີ່, ເກົ້ານູ້ລີ, ໄມກາວ, ເກົ້າວ້າ, ແລະໄມລີ່. (ພັລຍາຄົນທີ່ໜຶ່ງຂອງ ຕູ້ບີຊື່ນາງຢົ້ວໄດ້ເສັຍຊີວິດຢູ່ປ່າ ຍ້ອນພຍາທໄຂ້ປ່າບໍ່ມີຢາປົວ ເພາະຖືກແກວ, ຍີປຸ່ນ ແລະ ລາວອິສສຣະ ມົ້ງລໍ ໄລ່ຕິດຕາມ).

ໃນປີ 1958 ຖືກເລືອກຕັ້ງເປັນຜູແທນຣາຊດອນແຂວງຊຽງຂວາງ ແລ້ວໄດ້ຍ້າຍໄປຢູ່ ນະຄອນວຽງຈັນທ໌ນ.

ໃນວັນທີ່ 6 ເມສາ (April) ປີ 1960 ຖືກແຕ່ງຕັ້ງເປັນຣັຖມົນຕຣີກະຊວງໂຄສະນາ ແລະ ປະຊາສົງເຄາະໃນຣັຖບາລຊຸດທີ່ 11 ຮ່ວມກັບເຈົ້າ ສົມສະນິດ ເປັນນາຍົກຣັຖະມົນຕຣີ.

ໃນວັນທີ່ 9 ເດືອນສິງຫາ (August) ຫາວັນທີ່ 9 ເດືອນ ຕຸລາ (October) ປີ 1960 ໄດ້ຖືກເຈົ້າສຸວັນນາ ແຕ່ງຕັ້ງເປັນຣັຖະມົນຕຣີ ກະຊວງຍຸຕິທັມ, ກະຊວງທັມະການ ແລະ ໂຄສະນາການ. ຈຶ່ງຖືກສົ່ງໄປຊຽງຂວາງ ແຕ່ໄດ້ຖືກ ພັນຕຣີ ວ່າງປາວ ກັກຕົວໄວ້ ແລ້ວສົ່ງໄປໃຫ້ສະເດັຈເຈົ້າບູນອູ້ມ ແລະນາຍພົນພູມີ ໜໍ່ສວັນ.

ໃນວັນທີ່ 14 ທັນວາ (December) ປີ 1960 ໄດ້ຖືກແຕ່ງຕັ້ງເປັນ ຣັຖມົນຕຣີ ກະຊວງສາ ທາຣະນະສຸກ ແລະປະຊາສົງເຄາະ ຮ່ວມກັບ ຣັຖະບາລ ປາບ ຣັຖະປະຫາຣຈົນເຖິງປີ 1962.

ໃນປີ 1962 ໄດ້ຖືກແຕ່ງຕັ້ງເປັນ ຣັຖມົນຕຣີ ກະຊວງສາທາຣະສຸກໃນຣັຖບາລປະສົມສາມຝ່າຍກັບສະເດັຈ ເຈົ້າສຸວັນນາພູມາ.

ໃນວັນທີ່ 5 ເມສາ (April) ປີ 1974 ຖືກແຕ່ງຕັ້ງເປັນ ຣັຖະມົນຕຣີ ຊ່ວຍວ່າການກະຊວງໄປສະນີ ແລະ ໂທຣະຄົມມະນາຄົມ ໃນຣັຖະບາລ ສອງຝ່າຍລວມກັນ ລະຫວ່າງ ລາວ ຄ.ມ.ນ. ແລະ ຝ່າຍ ວຽງຈັນທນ໌.

ໃນວັນທີ່ 23 ເດືອນສິງຫາ (August) ປີ 1975 ພຍາຕູ້ບີ ລີຝຸງ, ໄດ້ຖືກເຈົ້າໜ້າທີ່ ລາວແດງຈັບ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ກຸມ, ແລະສົ່ງໄປຂັງໄວ້ໃນຄຸກທີ່ເມືອງວຽງໄຊຍ໌, ແຂວງຫົວພັນ ຊຶ່ງເປັນສູນກາງກັກຂັງ ນັກ ການເມືອງ ຝ່າຍຂວາ. ພຣະຍາ ຕູ້ບີ ລີຝຸງ ໄດ້ຂຽນຈົດໝາຍເຖິງພັລະຍາຂອງທ່ານ ຢູ່ຝຣັ່ງເສສ, ມີເນື້ອ ຄວາມວ່າ: *"ປະຈຸບັນນີ້ ອ້າຍຢູ່ດີມີແຮງ ແລະ ສະບາຍດີ, ນ້ຳໜັກຂອງອ້າຍບໍ່ເກີນ 40 ກິໂລກຣາມແລ້ວ."* ເປັນຄວາມ ເວົ້າລັບໆ ແລະ ສຳຄັນຫລາຍທີ່ສຸດ, ຕາມປົກກະຕິນັ້ນເວລາຍັງຢູ່ນະຄອນວຽງຈັນທນ໌, ພຣະ ຍາຕູ້ບີ ລີຝຸງ ມີນ້ຳ ໜັກບໍ່ລຸດ 90 ກິໂລກຣາມ ຫລັງຈາກຈົດໝາຍນັ້ນ ກໍບໍ່ໄດ້ຮັບຂ່າວອີກເລີຍ ຈົນ ກະທັ່ງປີ 1978, ຈຶ່ງໄດ້ ຂ່າວວ່າທ່ານໄດ້ເສັຍຊີວິດແລ້ວ. ຕາມຂ່າວຈາກຜູ້ທີ່ລອດພົ້ນມາເລົ່າວ່າ ພະຍາຕູ້ບີ ລີຝຸງ ຖືກທໍ ຣະມານ ຢ່າງຮ້າຍແຮງ ຈາກພວກລາວ ແດງ ຄ.ມ.ນ.ແລະ ຖືກຍິງເປົ້າປະຫານຊີວິດ.

## 3. ພົນຕຣີ ວ່າງປາວ



ເກີດໃນວັນທີ່ 8 ເດືອນທັນວາ (December) ປີ 1929, ຢູ່ບ້ານຫວ້ຍຂີ້ເທົ່າ ຕາແສງ ແກ້ງຄວາຍ ເມືອງໜອງແຮດ, ແຂວງຊຽງຂວາງ ພຣະຣາຊອານາຈັກລາວ ໄດ້ຮັບ ການສຶກບາງເລັກນ້ອຍ ຕອນອາຍຸວັຍຮຸ່ນ.

ໃນປີ 1945 ຍີປຸ່ນເຂົ້າມາລາວ ອາຍຸປະມານ 15 ປີ ໄດ້ອາສາສມັກເປັນ ຜູ້ສືບຂ່າວ ແລະ ສົ່ງຈົດ ໝາຍໃຫ້ ຝຣັ່ງເສສ, ຕູ້ບີ ລີຝຸງ, ແລະ ເຈົ້າສາຍຄຳ ສຸທະກະກຸມາຣ. ພໍອາຍຸເຖິງກະສຽນ ໄດ້ເຂົ້າຮັບໃຊ້ ຣາຊການ ທະຫາຣ ຝຣັ່ງເສສ ແລ້ວໄດ້ຮັບ ການຝຶກ ດ້ານ ທະຫາຣ:

- ✓ ໂຮງຮຽນນາຍ ສິບຕຣີແລະສິບເອກ (Caporal and Caporal-Chef ) ຢູ່ຫລວງ ພຣະບາງ
- ✓ ໂຮງຮຽນ ນາຍຈ່າເອກ (Sergent ) ຢູ່ນະຄອນວຽງຈັນທນ໌
- ✓ ປີ 1951 ໄດ້ເຂົ້າໂຮງຮຽນນາຍຮ້ອຍ ຢູ່ດົງເຫັນ (Ecole des Officiers) ຮຽນຈົບປີ1952

ເສັງໄດ້ ຊັ້ນວາທີຮ້ອຍຕຣີ (Aspirant) ໄດ້ຖືກສົ່ງໄປປະຈຳການຢູ່ເມືອງຮ້ຽມ, ຢູ່ທີ່ນັ້ນ ພັລະຍາ ຄົນທີ່ນຶ່ງ ຂອງ ວ.ຣ.ຕ. ວ່າງປາວ ໄດ້ເສັຍຊີວິດ ຍ້ອນ ພະຍາດໄຂ້ປ່າ ໄດ້ປະລູກ ສີ່ຄົນໄວ້ໃຫ້ ທ່ານ ວ.ຣ.ຕ ວ່າງ ປາວ (ສອງຊາຍ, ສອງຍິງ ).

ໃນເດືອນພຶສຈິກາ November 1952 ຖືກຕີແຕກອອກມາຈາກເມືອງຮ້ຽມ ໄດ້ຂຶ້ນຊັ້ນເປັນນາຍ ຮ້ອຍຕຣີ (S/Lieutenant ) ຕອນໜີມາຢູ່ປ່າ ທ່ານ ຣ.ຕ. ໄດ້ແຕ່ງງານໃໝ່. ເມັຍຄົນນີ້ ໄດ້ຢູ່ນຳບໍ່ດົນ ເພາະສາຕາບໍ່ຖືກກັນ ໄດ້ສົ່ງຄືນໃຫ້ເສັ່ງຊີງ.

ໃນປີ 1953 ລະຫວ່າງ ເດືອນແມສາ ໄດ້ແຕ່ງງານໃໝ່ກັບເມັຍ ນາງເຊັຍ ທ່າວ. ໃນເດືອນມິຖຸນາ (June). ໄດ້ຂຶ້ນຊັ້ນເປັນຮ້ອຍໂທ (Lieutenant) ຮັບໜ້າທີ່ເປັນຜູ້ຮອງ ຜ.ບ. ກົມທະຫາຣຣາບອາກາສ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຜົ່າລາວສູງ "ມົ້ງ" ແລະ ເຜົ່າລາວ (ກົມ GCMA). ພາຣະກິດ ແມ່ນຕິດຕາມກວດລ້າງວຽດມິນໄປໃສ່ເຂດໜອງແຮດ.

ໃນວັນທີ່ 16 ເດືອນພຶສຈິກາ (November) ປີ 1953 ໄດ້ຖືກບາດເຈັບ ໄດ້ຂຶ້ນຊັ້ນເປັນຮ້ອຍເອກ (Capitaine) ຂອງກອງທັບຝຣັ່ງ.

ໃນ 1954 ເມື່ອກວດລ້າງພື້ນທີ່ໃນເຂດໜອງແຮດ ລຽບຮ້ອຍແລ້ວ ໄດ້ຂຶ້ນຊັ້ນເປັນພັນຕຣີ ໄດ້ກັບ

ສັງໄຂ ຕຽມໄປໜູນຫລັງຄ້າຍທະຫາຣຝຣັ່ງເສສທີ່ດຽນບຽນຟູ ໄດ້ເປັນ ຜ.ບ. ກອງພົນປະສົມ ຕ່າງດ້າວ ເພື່ອນຳກຳລັງບໍ່ຕ່ຳກວ່າສິບພັນຄົນ ໄດ້ເດີນທາງຂຶ້ນໄປ ແຕ່ໄປບໍ່ທັນ ເພາະດຽນບຽນຟູ ໄດ້ ຖືກໂຈມຕີໜັກ ແລະ ໄດ້ຕົກໃຫ້ຄອມມຸຍນິສຕ໌ ກ່ອນຈະໄປເຖິງ ໃນວັນທີ່ 7 ເດືອນພຶດສພາ (May) ປີ 1954.ທ່ານໄດ້ນຳກຳລັງກັບໄປຕັ້ງຢູ່ໜອງແຮດ.

ປີ 1957 ຖືກສົ່ງໄປປະຈຳການຢູ່ເມືອງເປີນ ແຂວງຫົວພັນ.

ປີ 1958 ໄດ້ໄປທັສນະສຶກໃນຕ່າງປະເທສ ແລ້ວໄດ້ກັບມາຢູ່ຊັງໄຂ.

ໃນວັນທີ່ 25 ເດືອນພຶດສພາ (May) ປີ 1959 ໄດ້ສັ່ງກອງພັນ ເຜົ່າມົ້ງ ຜ.ບ. ແມ່ນ ພ.ອ. ລີ ປາວ ຕິດຕາມກອງພັນປະເທສ ລາວ ຜ.ບ. ແມ່ນ ພ.ທ. ຕູ້ ຢາ ທີ່ໄດ້ໜີອອກຈາກທົ່ງໄຫຫີນໃນວັນທີ່ 18 ພຶດສພາ (May) ປີ 1959.

ໃນປີ 1960 ໄດ້ມາເປັນ ຜ.ບ. ຮັກສາເດີນຍົນທົ່ງໄຫຫີນ ສອງອາທິດຫລັງຈາກ ຣ.ອ. ກອງແລເຮັດ ຣັຖປະຫາຣຢູ່ວຽງຈັນ ພັນຕຣີ ວ່າງປາວ ໄດ້ຖືກຜູ້ລອງ ລອບສັງຫາຣ ແຕ່ທ່ານໜີລອດໄປໄດ້ຢ່າງປອດໄພ້ຍ.

ໃນເດືອນກັນຍາ (September) ເຈົ້າສຸວັນນາໄດ້ສົ່ງນາຍພົນອຳຄາ ໄປເກັບເກັນເຂົ້າຈາກປະຊາ

ຊົນ ແຂວງຊຽງຂວາງ ແຕ່ໄດ້ຖືກພັນຕຣີ ວ່າງປາວ ກັກຕົວ ແລ້ວສົ່ງໄປໃຫ້ຄນະປາບຣັດທະປະ

ຫາຣ ທີ່ສັວນນະເຂຕ. ໃນຣະຫວ່າງກາງເດືອນກັນຍາ (September) ປີ 1960 ສະເດັຈເຈົ້າສຸວັນນະພູມາ ໄດ້ສົ່ງ ພຣະຍາຕູ້ບີ ລີຟຸງ ໄປເກັ້ຍກອ່ມປະຊາຊົນແຂວງຊຽງຂວາງ ແຕ່ຖືກພັນຕຣີ ວ່າງປາວ ກັກຕົວໄວ້ ແລ້ວສົ່ງໄປໃຫ້ຄນະປາບຣັດທະປະຫາຣ ທີ່ສວັນນະເຂຕ.

ໃນປີ 1961 ໄດ້ຮ່ວມກັບສະຫາຣັຖ ເພື່ອປົກປ້ອງການຂຍາຍອຳນາດ ຂອງຄອມມຸຍນິສຕ໌ໄປສູ່ລາວ ແລະເອເຊັຍຕາວັນອອກສ່ຽງໃຕ້ ຈຶ່ງເກີດສົງຄາມວຽດນາມ-ສະຫາຣັຖ. ທ່ານນາຍພົນຕຣີ ວ່າງປາວ ໄດ້ ປະຕິບັດໜ້າທີ່ຢູ່ໃນສນາມຣົບໄດ້ດີເດັ່ນ ແລະສາມາຖເຮັດ ໃຫ້ສັດຕຣູ ມີຄວາມເກງ ແລະ ສັ່ນສະເທືອນ ໄປທົ່ວເຂຕຮັບຜິດຊອບຂອງທ່ານ ໂດຽສະເພາະແມ່ນເຂຕ ພາຄ 2 ທີ່ປະກອບ ດ້ວຍແຂວງຫົວພັນ ແລະຊຽງຂວາງ.

ໃນປີ 1961 ໄດ້ຂຶ້ນຊັ້ນເປັນພັນໂທ.

ໃນປີ 1962 ໄດ້ຂຶ້ນຊັ້ນເປັນພັນເອກ ແລະ ເປັນ ຜ.ບ ພາຄ 2.

ໃນປີ 1963 ໄດ້ຂຶ້ນຊັ້ນເປັນພົລຈັຕຕະວາ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1965 ໄດ້ສ້າງໂຮງການແຂວງ; ໂຮງການເມືອງ; ແລະໂຮງໝໍແສນສຸກ ທີ່ຊໍາທອງ ໄດ້ຂື້ນຊັ້ນເປັນພິລຕຣີ ແລະໄດ້ຮັບພຣະຣາຊທານ ນາມມະຍົດ ຈາກພຣະເຈົ້າມະຫາຊີວິດ ສີສຫວ່າງວັທນາ ເປັນ <u>ພຣະຍາໜໍ່ຣະປະໂມກ</u> (ໝາຍຄວາມວ່າ ຫົວໜ້າສິງຕ໌ ຜູ້ມີໃຈກ້າຫາຣ ).

ໃນວັນທີ່ 14 ເດືອນພຶດສະພາ (May) 1975 ໄດ້ອົພະຍົບໄປຢູ່ ສູນຝຶກນໍ້າຝອງ, ຣາຊອາ ນາຈັກໄທຍ, ຈັງວັດຂອນແກ່ນ.

ໃນວັນທີ່ 2 ມິຖຸນາ (June) ປີ 1975 ໄດ້ອອກຈາກນໍ້າພອງ ປະເທສໄທ໌ຍໄປປະເທສຝຣັ່ງເສສ.

ໃນວັນທີ່ 5 ເດືອນກໍລະກະດາ (July) ປີ 1975 ໄດ້ມາເຖິງ ສະຫາຣັຖ.

ໃນ ປີ 1981 ໄດ້ເຂົ້າຮ່ວມການຈັດຕັ້ງແນວໂຮມປົດປ່ອຍຊາຕ ກັບຜູ້ນໍາລາວຫລາຍຄົນຄື ດັ່ງຕໍ່ລົງໄປນີ້: ທ່ານອີແປງ ສູຣິຍະໄດ, ທ່ານເຈົ້າສີສຸຂ ນະຈໍາປາສັກ, ທ່ານໂງ່ນ ຊນະນິກອນ, ທ່ານ ຄໍາພັນ ປັນຍາ, ທ່ານ ກຸປຣະສິດ ອາໄພຍ, ທ່ານຫູມພັນ ໄຊຍະສິດ, ແລະ ທ໌ານນາຍພົນ ພູມີ ໜໍ່ສວັນ.

ໃນປີ 1982, ໄດ້ຍ້າຍຈາກຣັຖມິງຕານາ ໄປຢູ່ຣັຖກາລີຟອກເນັງ ເພື່ອຄວາມສະດວກໃນການດໍາເນີນວຽກງານ ກັບການຈັດຕັ້ງ ຄະບວນແນວໂຮມກູ້ຊາຕ ນໍາເຈົ້າພຣະຍາຫລວງ ອຸທອງ ສຸວັນນະວົງ.

ໃນວັນທີ່ 4 ເດືອນ ມິຖຸນາ (June) ປີ 2007, ຖືກຈັບຍ້ອນຂໍ້ຫາການເມືອງ ວ່າມີແຜນກໍ່ການຮ້າຍ ຈະໂຄລົ້ມ ຣັຖບາລ ສປປລ.

ໃນວັນທີ່ 7 ເດືອນທັນວາ (December) ປີ 2007, ຖືກປ່ອຍອອກມາ ເພາະຂໍ້ຫາແລະລັກຖານບໍ່ພຽງພໍ. ບັນຫານີ້ ໄດ້ເຮັດໃຫ້ເຈົ້າໜ້າທີ່ອາເມຣິກາ ກືນບໍ່ເຂົ້າຄາຍກໍບໍ່ອອກ ສານຈຶ່ງໄດ້ໂຈະຄະດີໄວ້.

ໃນວັນທີ່ 11 ເດືອນພຶດສະພາ (May) ປີ 2009 ໄດ້ກັບໄປຂຶ້ນສານອີກ ແຕ່ໄດ້ເລື່ອນໄປໃສ່ວັນທີ່ 5 ເດືອນຕຸລາ (October) ປີ 2009 ລັກຖານບໍ່ພຽງພໍອີກ ແລະ ຄົນທີ່ມີສ່ວນພົວພັນຫລາຍຄົນໄດ້ຂາດ ບໍ່ມາປະກົດຕົວ. ມີປະຊາຊົນລາວສູງ “ມົ້ງ” ໄປເດີນຂະບວນ ຫລາຍກວ່າ 10 ພັນຄົນ ບໍ່ເຫັນດີຕໍ່ການ ຫາເຣື່ອງໃສ່ທ່ານນາຍພົນ ວ່າງປາວ ຄັ້ງນີ້ ວ່າ: "ແມ່ນແຜນສະຫາຣັຖ ເປີດປະຕູໃຫ້ຄອມມຸຍນິສຕ໌ ເຂົ້າໄປສ້າງຄວາມປັ່ນປ່ວນຢູ່ໃນສະຫາຣັຖ ຈຶ່ງເກີດບັນຫາຕ່າງໆ ເຫລົ່ານີ້ຂຶ້ນ" ໃນທີ່ສຸດ ຄະດີຂອງທ່ານ ນາຍພົລ ວ່າງປາວ ກໍ່ໄດ້ຖືກຍົກເລີກໄປ.

ໃນ ວັນທີ່ 22 ເດືອນທັນວາ (December) 2009 ທ່ານນາຍພົນ ວ່າງປາວໄດ້ປະກາສຈະ ກັບໄປເມືອງລາວ ແຕ່ ສປປລ ປະຕິເສດບໍ່ໃຫ້ເຂົ້າປະເທສ. ໃນເດືອນທັນວາ ວັນທີ່ 28, 2009 ຣັຖບາລໄທຍ໌ ໄດ້ສົ່ງອົພະຍົບຈາກສູນຫວັຍນໍ້າຂາວ ຫລາຍກວ່າ 5,000 ຄົນ ກັບໄປ ສປປລ ໄປຕັ້ງ ບ້ານໃໝ່ ຢູ່ບ້ານໂພນຄໍາ ແຂວງຄໍາມ່ວນ. ພວກອົພະຍົບລາວສູງນີ້ ໄດ້ພົບບັນຫາຫລາຍຢ່າງ ຕາມຂ່າວໜັງສືພິມ.

ໃນວັນທີ່ 19 ເດືອນມິຖຸນາ (June) ປີ 2010, ທ່ານນາຍພົນ ວ່າງປາວ ສຸຂພາບເລີ່ມບໍ່ດີ ແລະບໍ່ແຂງແຮງ ຍ້ອນຫົວໃຈທໍາງານບໍ່ປົກກະຕິ. ວັນທີ່ 1 ເດືອນກໍລະກະດາ (July) ປີ 2010, ທ່ານໄດ້ ເດີນທາງໄປຢ້ຽມຢາມຊາວລາວເຜົ່າມົ້ງ ທີ່ຣັຖມິເນໂຊຕາ. ໃນວັນທີ່ 25 ເດືອນທັນວາ (December) 2010 ທ່ານໄດ້ເດີນທາງມາສະຫລອງບູນຈຽງປີໃໝ່ມົ້ງ ທີ່ແຟຣສໂນ. ທ່ານໄດ້ລົ້ມເຈັບ ຍ້ອນຕາກໜາວ ລົມເຂົ້າ


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ປອດ ໄດ້ເຂົ້ານອນໂຮງໝໍ ວັນທີ່ 26 ເດືອນ ທັນວາ (December) ປີ 2010.

ໃນວັນທີ່ 6 ເດືອນມັງກອນ (January) ປີ 2011 ທ່ານໄດ້ເສັຍຊີວິດ ຢູ່ໂຮງພະຍາບາລເມືອງ ໂຄຣວິສ ໃນຕອນເຊົ້າ. ໄດ້ເອົາສົບມາທຳພິທີ ຢູ່ໂຄຣວິສ ຄອມມຸນິຊັນເຕີ ໃນວັນທີ່ 4 ຫາ 9 ເດືອນ ກຸມພາ (February) ປີ 2011 ມີປະຊິນພີ່ນ້ອງລາວ ແລະລາວສູງ "ມົ້ງ" ທີ່ມາຈາກຕ່າງປະເທສ ແລະ ພາຍໃນປະເທສສະຫາຣັຖ ມາງານສົບ ບໍ່ຕ່ຳ "ຫ້າສິບພັນ ຄົນ" ເປັນງານທີ່ໃຫ່ຍໂຕທີ່ສຸດ ແລະ ບໍ່ເຄີຍມີມາແຕ່ກ່ອນໃນສະຫາຣັຖ.

## 4. ພຣະຍາ ຕຸລາປະສິທ ຕູ້ເຢີ ລີຟຸງ



ທ່ານເກີດວັນທີ່ 12 ເດືອນ ມີນາ (March) 1921 ຢູ່ບ້ານຍອດຄານ້ອຍ ກອງນອງແຮດ ແຂວງຊຽງຂວາງ ພຣະຣາຊອານາຈັກລາວ ເປັນບຸຕ ຂອງທ່ານ ລີຟຸງ ແລະ ນາງ ວ້າ ຢາງ. ການສຶກສາ: ທ່ານໄດ້ຮຽນຈົບປະຖົມສຶກສາ ຢູ່ໂຮງຮຽນເມືອງຊຽງຂວາງ, ຮຽນຈົບມັທຍົມ ການສຶກສາຢູ່ເມືອງ ວິ້ນ ວຽດນາມກາງ, ຮຽນຈົບປະຣິນຍາໂທ ຝ່າຍວິຊາກະເສຕຢູ່ຮາໂນຍ ວຽດນາມເໜືອ, ຈົບຫລັກສູດການຝຶກຫັດວິຊາ ດ້ານກົດໝາຍຂັ້ນສູງ ຢູ່ປາຣີສ ປະເທສ ຝຣັ່ງເສສ.

ໃນປີ 1949, ໄດ້ແຕ່ງງານກັບນາງສີສະໝອນ ທັມະວົງ ເປັນລູກສາວຂອງຍາພໍ່ທິບ ທັມະວົງ ມີລູກ ດ້ວຍ ກັນ ເຈັດຄົນ.

ໃນປີ 1945-1946 ໄດ້ປະກອບສ່ວນ ຮ່ວມມືກັບຝຣັ່ງເສສ ທຳສົງຄາມ. ໃນວັນທີ່ 27 ເດືອນ ມັງກອນ (January) ປີ 1946 ປົດປ່ອຍຕົວເມືອງຊຽງຂວາງ ອອກຈາກ ລາວອິສສຣະ ກັບວຽດມິນ ແລະ ປ້ອງກັນ ຕົວເມືອງ ຊຽງຂວາງ ໄວ້.

ໃນປີ 1948-1951 ເປັນທີ່ປຶກສາພຣະມະຫາກະສັຕຣ໌ ສີສວ່າງວົງສ໌ ຫລືສະມາຊິກສະພາຣາຊມົນຕຣີ.

ໃນປີ 1951-1955 ເປັນຜູ້ແທນຣາຊດອນແຂວງຊຽງຂວາງ ປະຈຳການຢູ່ສະພາຜູ້ແທນຣາສດອນ.

ໃນປີ 1955-1956 ເປັນຫົວໜ້າສາລອຸທອນ ແລະ ສາລລົບລ້າງ ຂອງພຣະຣາຊອານາຈັກລາວ.

ໃນປີ 1956-1957 ເປັນສະມາສິກ ກັມມະການ ນານາຊາຕ ຕາງໜ້າລາວຢູ່ປະເທສພະມ້າ.

ໃນປີ 1960-1966 ເປັນອະທິບໍດີກະຊວງຍຸຕິທັມ ເປັນປະທານສາລອຸທອນ ແລະ ເປັນທີ່ປຶກສາຂອງຣັຖມົນຕຣີກະຊວງຍຸຕິທັມ ແລະເປັນສະມາສິກ ຄນະກັມມະການພັທນາລຸ່ມແມ່ນ້ຳຂອງ ເພື່ອເຂົ້າ ຮ່ວມ ປະຊູມທີ່ນິວຢອກ ສະຫາຣັຖ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ1968, ເປັນຫົວໜ້າສາລສູງສຸດຣາຊອານາຈັກລາວຫລື ອັຍການສາລພຣະມະຫາ ກະສັຕຍ໌.

ໃນປີ 1971, ເປັນສະມາສິກຄນະກັມມະການນັກກົດໝາຍ ທີ່ປາກພາສາຝຣັ່ງເສສ ເຂົ້າຮ່ວມ ປະຊຸມຢູ່ການາດາ ແລະໃນປີ 1974 ເປັນສະມາສິກຄນະກັມມະການຂອງລາວ ເຂົ້າຮ່ວມປະຊຸມການ ວາງແຜນປ້ອງກັນຄອບຄົວຢູ່ທີ່ປະເທສ ຕຸຍນີຊີ.

<u>ຄຳຍອ້ງຍໍຄຸນຄວາມດີ</u>:

ພຣະຍາຕຸລາປະສິທໄດ້ຮັບຫລຽນອິສສຣິຍາພຣ ຫລາຍຕຣາ ຄື:

- ✓ ປີ 1945 ຫລຽນກ້າຫາຣຝຣັ່ງເສສ; ຫລຽນກ້າຫາຣລ້ານຊ້າງຮົ່ມຂາວ, ຫລຽນອານານິຄົມ ຝຣັ່ງເສສ; ຫລຽນຕຣາຂັ້ນສູ່ງສຸດຂອງຝຣັ່ງເສສ ແລະ ຫລຽນຕຣາລ້ານຊ້າງຮົ່ມຂາວ ຈາກພຣະຣາຊອານາຈັກລາວ.
- ✓ ໃນປີ 1972, ໄດ້ຮັບພຣະຣາຊທານນາມມຍົສ ຂຸນນາງ ເປັນ “ພຣະຍາ ຕຸລາປະສິທ“ (ພຣະຍາຍຸຕິທັມທີ່ມີຄວ**າມສຳເຣັຈ** ມີປຣະສິທທິພາບ) ຈາກພຣະເຈົ້າມະຫາຊີວິດສີສຫວ່າງວັທນາ. ພະຍາຕຸລາປຣະສິດ ຕູ້ເຢີ ລີຝຸງ ເປັນຂ້າຣາຊການຊັ້ນສູງ, ຄື ຊັ້ນເອກພິ້ນຊັ້ນ (ກາຍຊັ້ນທີ່ 13) ຂອງກະຊວງຍຸຕິທັມ.

ໃນປີ 1975, ທ່ານຕູ້ເຢີ ລີຝຸງ ໄດ້ອົພະຍົບໄປຢູ່ປະເທສຝຣັ່ງເສສ.

ໃນປີ 1992 ທ່ານໄດ້ຍ້າຍມາຢູ່ສະຫາຣັຖແລ້ວໄດ້ຖືສັນຊາຕ ອາເມຣິກາ ປີ 2004. ໄດ້ເຖິງແກ່ກັມດ້ວຍ ອາຍຸໄວສະຣາໃນ ວັນທີ່ 10 ເດືອນກູມພາ (February) ປີ 2004).


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## 5. ພ.ອ. ເມສນິເອ (Col. Mesnier)



ທ່ານເກີດວັນທີ່ 25 ພຶສພາ (May) 1926, ແຕ່ງງານກັບນາງ ຝຣັ່ງຊື່ວ, ມີລູກດ້ວຍກັນສາມຄົນ. ໜ້າທີ່ ເປັນຜູ້ບັງຄັບກອງທະຫານແຕ່ 1944-1956. ເປັນຜູ້ບັງຄັບບັນຊາ ທະຫານກອງໂຈຣຢູ່ທາງເຂດເໜືອ ດອກໂດຍເຍີ, ຜ່ານບັ້ນລົບພາຄ ອາລຊາຊ ແລະ ເຢັຍຣະມັນ (Marquis en Dordogne-Nord, Campagnes d'Alsace et d'Allemagne).

ໃນປີ 1945-1947 ໄດ້ຖືກສົ່ງໄປປະຈຳການຢູ່ໃນອິນດູຈີນ (Indochine). ກ່ອນເດີນທາງໄປ ອິນດູຈີນ ໄດ້ກັບໄປຮຽນນາຍຮ້ອຍ ແຊັງຊຽກ ທີ່ ໂກເອັຕກີດອງ ຊຸດທີ່ 1330 (Saint Cyr, Coetquidan Promotion 1330) ຮຽນຝຶກການຫາຂ່າວ, ໂດດຈອັງ ແລະຮຽນຕໍ່ສູ້ ປ້ອງກັນ ດ້ານແນວຫລັງ ຈົບການຮຽນແລ້ວ ໄດ້ຖືກສົ່ງໄປປະຈຳການຢູ່ໃນອິນດູຈີນ.

ໃນປີ 1950-1952, ເປັນຜູ້ບັນຊາການ ກຣົມຊາວມົ້ງ ຢູ່ ພາຄໃຕ້ຂອງວຽດນາມ. ເປັນຜູ້ບັນຊາການ ກຣົມ ຢີຊີເອມເອ (GCMA) ນຳ ພ.ຕ. ວ່າງປາວ ແລະ ຣ.ອ. ຊາສຊີ ຈົນເຖິງ 1954.ທ່ານໄດ້ມາຢາມນານພົນວ່າງປາວ ຢູ່ສຫະຣັຖ ສອງຄັ້ງ ໃນປີ 2008 ແລະ 2009. ທ່ານເສັຍຊີວິດ ຢູ່ເມືອງ ແອກອັງໂປຣ ວັງ (Aix-en-Provence), ຝຣັ່ງເສດ ວັນທີ່ 13 ໂນວັມເບີ 2011.

## 6. ຣ.ອ. (ນາຍພົລ ຈັຕຕະວາ) ກອງແລ



ເກີດປີ 1934 ຢູ່ພາກໃຕ້ຂອງລາວ ພໍ່ແລະແມ່ ແມ່ນຈູ້ມເຈື້ອເຜົ່າລາວເທີງ ທາງພາຄໃຕ້ຂອງລາວ,

ພໍ່ ຂອງທ່ານ ກອງແລ ໄດ້ ເສັຍຊີວິດ ໃນປີ 1940. ກອງແລໄດ້ເຂົ້າມາສຶກສາຢູ່ໃນເມືອງສວັນນະເຂຕ ຕອນອາຍຸປະມານ 17 ປີ ແລ້ວ ໄດ້ໄປເຂົ້າທະຫານ ຝຣັ່ງ ແລະ ໄດ້ເຂົ້າຮຽນ ເປັນນາຍທະຫານ ຟ່າຍໂດດຈອັງ ຮຽນຈົບປີ 1953 ມີນັກຮຽນ ດ້ວຍກັນ 21 ຄົນ ເສັງຜ່ານ ເປັນຜູ້ທີ່ 19. ໄດ້ຖືກແຕ່ງຕັ້ງໃຫ້ໄປປະຈຳການກັບ ທ່ານ ຣ.ອ ອ້ວນ ຣະຕິກຸນ ທີ່ຫລວງພະບາງ ໄດ້ໄປທ່ອງ ທ່ຽວສຶກສາຕ່າງປະເທສ ຫລາຍບ່ອນ.

ໃນປີ 1957 ໄດ້ຖືກແຕ່ງຕັ້ງ ມາເປັນຄູຝຶກ ໜ່ວຍກ້າຕາຍ ທີ່ຄ້າຍທະຫານ ຈີນາຍໂມ້ ຈຶ່ງມີໂອກາດໄປພົບ ເຈົ້າສຸພານຸວົງສ໌ ລັບໆທຸກຄ່ຳຄືນ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນຕົ້ນປີ 1959 ໄດ້ຖືກແຕ່ງຕັ້ງເປັນ ຜ.ບ. ກອງພັນໂດດຈອ້ງ ທີ່ສອງ ຜູ້ຮອງແມ່ນ ຣ.ອ. ເດືອນ ສູນນາຣາຊ ຢູ່ໃນການຟຶກຊອ້ມ ແລະ ການຊ່ວຍ ເຫລືອ ຈາກສະຫາຣັຖ.

ໃນວັທີ່ 9 ສີງ ຫາ ປີ 1960 ໄດ້ກໍ່ການປະຕິວັຕ ໂຄລົ້ມຣັຖບາລຂອງເຈົ້າສົມສນິດ ແລະ ຜູ້ຮອງ ນາຍົກ ແມ່ນນາຍພົນພູມີ ໜໍສວັນ

ໃນປີ 1965 ໄດ້ອອກຈາກພາຄ 2 ມາຕັ້ງຢູ່ກາສີແລະວັງວຽງ ໄດ້ຖືກເນຣະເທສອອກຈາກຣາຊ ອານາຈັກລາວ ໄປປະເທສໄທ໌ຍ ແລ້ວ ປະເທສຝຣັ່ງ.

## 7. ພ.ຕ.ຕ. ຮັງດິວ

ໄດ້ຮັບໃຊ້ຣາຊການຕໍາຣວຈແຂວງຊຽງຂວາງຄື:
ໃນວັນທີ່ 28 ພຶສະພາ (May) 1958,ຖືກສົ່ງໄປຮຽນວິຊາດ້ານຕໍາ ຣວຈທີ່ດອນຕີ້ວ, ແຂວງວຽງຈັນທນ໌.

ໃນເດືອນ 5 (May) 1959 ເມື່ອການຝຶກໂອບຣົມຈົບແລ້ວໄດ້ມາປະຕິບັດໜ້າທີ່ດ່ານຕໍາຣວຈຢູ່ ເມືອງ ໂພນສວັນ ແຂວງຊຽງຂວາງ.

ໃນຕົ້ນປີ 1961 ພາຍຫລັງ ກອງແລປະຕິວັດ ໄດ້ຍ້າຍໄປປະຈໍາຢູ່ເຂດທ່າລີນນ້ອຍ. ກາງປີ 1961, ໄດ້ຮັບຄໍາສັ່ງແຕ່ງຕັ້ງຂອງທ່ານນາຍພົນ ວ່າງປາວ ໃຫ້ເປັນຜູ້ຮອງ ຜ.ບ ກອງພັນ ເຂດທ່າລີນນ້ອຍ.

ໃນ 1962, ໄດ້ໄປປະຈໍາຢູ່ສັນຈໍ້ (LS02) ແລະ ປາກຄາ-ນາຊຽງ (ເຂດ6A) (LS181) ເຖີງເດືອນ ຕຸລາ (October) 1969 ຕອນຢູ່ໃນໜ້າທີ່ຝ່າຍທະຫາຣ.

ໃນປີ 1968, ໄດ້ເຂົ້າໂອບຣົມວິຊາ ເສນາທິການ ດ້ານຢຸດທະວິທີ ການລົບ ໂດຍຄຣູໄທ໌ຍ.

ໃນປີ 1969-1970, ກຣົມຕໍາຣວຈແຫ່ງຊາດ ໄດ້ສົ່ງໄປໂອບຣົມວິຊາຕໍາຣວຈສາກົນດ້ານການ ຂ່າວ ຢູ່ປະ ເທສມາເລເຊັຍ.

ໃນປີ 1970-1971,ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ບັງຄັບບັນຊາການຕໍາຣວດໃນເມືອງວຽງໄຊຍ໌ແຕ່ທີ່ ທໍາງານ ປະຈໍາ ແມ່ນຢູ່ ລ່ອງແຈ້ງ.

ໃນປີ 1971-1972, ໄດ້ເຂົ້າໂອບຣົມເສນາທີ່ການຕໍາຣວຈຢູ່ ນະຄອນວຽງຈັນທນ໌ ແລະ ໄດ້ຂຶ້ນ ຊັ້ນເປັນ ພ.ຕ.ຕ. ໂດຽພຣະເຈົ້າມະຫາຊີວິດສີສວ່າງວັທນາຫຣົງພຣະຣາຊທານໃຫ້. ເມື່ອກາຣອົບຣົມຈົບ ແລ້ວໄດ້ກັບຄືນໄປປະຈໍາການຢູ່ລ່ອງແຈ້ງຕາມເດີມ.

ໃນປີ 1973, ໄດ້ໄປອົບຣົມການຂ່າວຕໍາຣວດຢູ່ນະຄອນວຽງຈັນທນ໌ ແລະ ໄດ້ກັບຄືນໄປປະຈໍາຢູ່ ລ່ອງແຈ້ງຈົນກະທັ້ງ ປີ 1975. ສະພາບດ້ານການເມືອງໄດ້ປ່ຽນແປງຈື່ງໄດ້ອົພຍົບລີບພັຍໄປຢູ່ ສະຫາຣັຖ, ແລະ ປະຈຸບັນໄດ້ຖືສັນຊາຕເປັນອາເມຣີກາຮຽບຮ້ອຍແລ້ວ.

## 8. ຍາຫລວງ ບູນຈັນ ວຸທິສີສົມບັດ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

(ອະດີດເຈົ້າເມືອງ ໜຄຳ ແລະ ລອງເຈົ້າແຂວງຊຽງຂວາງ).



ມື້ວັນເກີດແທ້ແມ່ນວັນທີ່ 27 ເດືອນທັນວາ (December) ປີ 1927 ແຕ່ວັນແຈ້ງໃນໜັງສືວັນເກີດທາງຣາຊການແມ່ນ ວັນທີ່ 2 ເດືອນ ພຶສຈິກາ (November) ປີ 1928 ເກີດຢູ່ບ້ານຕອງ ຕາແສງຄຳ ເມືອງຄຳ, ແຂວງຊຽງຂວາງ. ເຂົ້າໂຮງຮຽນປະຖົມການສຶກສາ ຫລື ຫອ້ງທີ່ໜຶ່ງ (Cours Superieur) ຢູ່ຊຽງຂວາງ ໃນປີ 1945 ພ້ອມ ລີຕູ້ ລີຝຸ່ງ.

ດ້ານໜ້າທີ່ການ ໃນວັນທີ່ 1 ເດືອນ ກັນຍາ (September) ປີ 1945, ໄດ້ເປັນຄຣູສອນໜັງສື ຢູ່ຊຽງຂວາງ. ທ້າຍເດືອນ ຕຸລາ October 1945, ຖືກຍ້າຍ ໄປເປັນຄຣູ ປ່ຽນສາທຸ ພໍ່ເຈົ້າສິມ ໜໍຄຳ ຢູ່ເມືອງສຸຍ, ໄປເຖິງເມືອງສຸຍ ປະມານສອງສາມມື້ ມີກອງທະຫາຣ ລາວອິສສຣະ ລ.ປ.ລ. (ກອງທັພລາວຂອງເຈົ້າເພັຊຣາຊ) ໄປປົດເຈົ້າຊີວິດ ຢູ່ຫລວງພຣະບາງ ແລ້ວມາຮອດເມືອງສຸຍ. ກອງທະຫາຣ ລ.ປ.ລ. ໄດ້ຈັບ ຍາຫລວງ ບູນຈັນ ແລ້ວ ພາຕົວທ່ານໄປນຳ, ໄປຕີ ຍຶດເອົາ ເມືອງຊຽງຂວາງ ໃນວັນທີ່ 28 ເດືອນພຶສ ຈິກາ (November) ປີ 1945, ໄດ້ຢູ່ຊຽງຂວາງ ບໍ່ດົນເທົ່າໃດ ກໍມີກອງທະຫາຣຝຣັ່ງເສສ ແມ່ນພຣະຍາຕູ້ບີ ລີຝຸ່ງ ແລະ ເຈົ້າແຂວງສາຍຄຳ ສຸທະກະກູມາຣ ມາຕີກອງທັພ ລ.ປ.ລ. ໄລ່ໜີອອກຈາກຊຽງຂວາງ ໃນວັນທີ່ 27 ເດືອນມັງກອນ (January) ປີ 1946. ພຣະຍາຕູ້ບີ ໃຊ້ເວລາຕີອ້ອມຊຽງຂວາງປະມານສາມມື້ ກອງພັນ ລປລ ຈຶ່ງແຕກໜີໄປທາງທ່າວຽງ. ກອງ ທັພ ພຣະຍາຕູ້ບີ ເຈົ້າສາຍຄຳ ມີທະຫາຣ "ມົ້ງ" ສ່ວນຫລາຍ ກັບທະຫາຣ ລາວເທີງ ແລະ ລາວລຸ່ມ.

ໃນປີ 1946 ໄດ້ໄປປະຈຳການຢູ່ບ້ານຫວ້ຍ ຄຳ (ບ້ານແກວ ຕັ້ງຢູ່ຖນົນເລຂທີ່ 7 ລະຫວ່າງຂັງໄຂ ແລະ ໂພນສວັນ). ທ່ານເຈົ້າເມືອງໜແປກ ຕອນນັ້ນແມ່ນ ທ້າວຄຳແພງ ຕໍ່ມາແມ່ນ ທ້າວວັນ ຕາໂນວັນ.

ໃນປີ 1947, ຫລັງຈາກໄດ້ແຕ່ງງານເອົາພັລຍາ ຢູ່ລາດຮ້ວງແລ້ວ ໄດ້ຍ້າຍໄປປະຈຳການຢູ່ໂຮງການ ເມືອງໜຄຳ ເວລານັ້ນ ທ່ານເຈົ້າເມືອງໜຄຳ ແມ່ນທ້າວບູນມີ ທິບພະວົງ ພໍ່ຂອງ ພ.ອ. ສີສະວັດ. ໄດ້ປະ ຈຳຢູ່ໂຮງການເມືອງໜຄຳ ປີ 1948 ເຖິງ 1950 ໄດ້ໄປເຂົ້າໂຮງຮຽນກົດໝາຍຢູ່ນະຄອນວຽງຈັນທນ໌ ເວລາຮຽນກົດໝາຍ ໄດ້ເຂົ້າໂຮງຮຽນເຄິ່ງມື້ ຮຽນຕອນເຊົ້າຕອນແລງ ໄດ້ໄປເຮັດການຢູ່ສຳນັກນາຍົກຣັຖມົນຕຣີ. ໃນປີ 1949 ແມ່ນສະເດັຈເຈົ້າບູນອູ້ມ ນະຈຳປາສັກເປັນນາຍົກ ຣັຖະມົນຕຣີ ເລຂາແມ່ນ ທ່ານ ບົວສີ ຄົນຊຽງຂວາງ.

ໃນປີ 1950, ຫລັງຈາກຮຽນໂຮງຮຽນກົດໝາຍ ເສັງໄດ້ແລ້ວ ໄດ້ຂຶ້ນເຄື່ອງບິນ (Air Azur) ຢູ່ວຽງຈັນທນ໌ເພື່ອຈະໄປລົງ ທົ່ງໄຫຫີນ ບາງເອີນເວລານັ້ນແມ່ນ ເດືອນ ມັງກອນ (January) ມີໝອກ ອັດເດີນຍົນເຮືອບິນລົງບໍ່ໄດ້ ຈຶ່ງໄດ້ກາຍໄປລົງ ຢູ່ ຮາໂນຍ ວຽດນາມ (Hanoi, Vietnam) ໄດ້ນອນຄ້າງຢູ່ໂຮງແຮມ ແມ່ນບໍຣິສັດຈ່າຍໃຫ້ ມື້ອື່ນເຊົ້າຈຶ່ງໄດ້ຂຶ້ນຍົນຕ໌ມາລົງທົ່ງໄຫຫີນ. ໃນປີ 1950, ທ້າວຄຳໝັ້ນວໍລະສານ ເປັນຄົນພື້ນເມືອງໜໂພນທອງ ໄດ້ໄປເປັນເຈົ້າເມືອງໜຄຳ, ປ່ຽນທ້າວບູນມີ ທິບພະວົງຄຳເຮືອງ.


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນວັນທີ່ 9 ເດືອນ ມັງກອນ (January) 1958 ຖືກແຕ່ງຕັ້ງໃຫ້ເປັນຜູ້ລອງເຈົ້າເມືອງຯຄໍາ.

ໃນປີ 1960, ໄດ້ໄປທັສນະສຶກສາເບິ່ງການສ້າງສາຢູ່ ປະເທສມາເລຊີ (Malaysia) ພ້ອມຄນະເຈົ້າເມືອງທົ່ວປະເທສລາວ ກັບທ່ານອາທິບໍດີກະຊວງມະຫາໄທ ໄປຢາມເມືອງ ກົວລາລົມເປີ (Kuala-Lumpur) ປະມານໜຶ່ງເດືອນໄດ້ໄປຢູ່ ຊິງກາໂປ (Singapore).

ໃນປີ 1974 ທ່ານນາຍພົລ ວ່າງປາວ ແລະສາທຸເຈົ້າແຂວງສາຍຄໍາ ສຸທະກະກຸມານໄດ້ພາ ຍາຫລວງ ບູນຈັນ ຂຶ້ນໄປຫລວງພຣະບາງ ໄປຖວາຍພະຣາຊບາສີ ແດ່ອົງຄ໌ສົມເດັຈພະເຈົ້າມາຫາຊີວິດ ຢູ່ພຣະ ຣາຊວັງຫລວງພະບາງ. ພະບາດສົມເດັຈພະເຈົ້າສີສວ່າງວັທະນາ ໄດ້ພະຣາຊທານນາມມະຍົດໃຫ້ຍາຫລວງບູນຈັນ ເປັນຊັ້ນເພັຍ.

ໃນເດືອນເມສາ (April) 1975, ຣັຖບາລໄດ້ອອກຄໍາສັ່ງແຕ່ງຕັ້ງໃຫ້ ຍາຫລວງ ບູນຈັນ ແລະທ່ານມົວເຈັ້ຍ ຈີງຕົວມົວ ເຂົ້າຮັບໜ້າທີ່ເປັນຮອງເຈົ້າແຂວງຊຽງຂວາງ ຍ້ອນການເມືອງໃນລາວ ໄດ້ ປ່ຽນແປງ ຢ່າງບໍ່ໜ້າເຊື່ອ, ສະຫາຣັຖຈຶ່ງໄດ້ຕັດສິນໃຈ ຖອນອອກຈາກອິນດູຈີນ ຢ່າງຂຶ້ນເຊີງ ເຮັດ ໃຫ້ຝ່າຍຣັຖບາລວຽງຈັນທນ໌ ຂາດການຊ່ວຍເຫລືອທຸກດ້ານ.

ໃນເດືອນພຶດສະພາ (May) 1975, ທະຫາຣແກວ ແລະ ແນວລາວໄດ້ຕີເຂົ້າມາທາງ ເລຂທີ່1 3 ຫາບ້ານ ຊອັນແລ້ວ ຕຽມຈະຂຶ້ນໄປຫາລ່ອງແຈ້ງ ທ່ານນາຍພົລ ວ່າງປາວ ໄດ້ຂໍຍົນຕ໌ອາເມຣິກາ ມາຂົນເອົາ ນາຍທະຫາຣ ຂ້າຣາຊການ ທີ່ຮ່ວມງານ ນໍາທ່ານນາຍພົລ ວ່າງປາວ ບິນອອກຈາກລ່ອງແຈ້ງມາລົງຢູ່ຄ້າຍທະຫາຣເກົ່າ ທີ່ນໍ້າພອງ, ຈັງຫວັດຂອນແກ່ນ, ປະເທສໄທຍ໌ ມາຢູ່ນໍ້າພອງ ແລ້ວ ມາຢູ່ ສູນປາກສູ່ມ ຈັງຫວັດເລີຍ. ໃນປີ 1976, ຈຶ່ງໄດ້ຂຶ້ນເຮືອບິນຈາກບາງກອກ ໄປປະເທສຝຣັ່ງເສສ ຈົນເທົ່າທຸກວັນນີ້.

ໃນວາຣະບ້ານເມືອງຢູ່ໃນສະພາບການທົວລ້ຽວທົວຕໍ່, ຄອບຄົວຂອງທ່ານໄດ້ຮັບຄວາມຫຍູ້ງຍາກຫລາຍຢ່າງ. ໃນປີ 1960 ຫາ 1975, ທ່ານມີຄວາມພໍອົກ ພໍໃຈຢູ່ຮ່ວມວຽກງານ ກັບທ່ານນາຍພົລ ວ່າງປາວ ແລະ ພີ່ນ້ອງລາວ ແລະ ພີ່ນ້ອງເຜົ່າມົ້ງ. ທ່ານຈຶ່ງຮູ້ບູນຄູນ ຂອງທ່ານນາຍພົນ ວ່າງປາວ ເປັນ ອັນມາກ ໃນການທີ່ທ່ານນາຍພົນໄດ້ເອົາໃຈໃສເບິ່ງ ແຍງຄອບຄົວໃຫ້ ໃນລະຍະ ຣ.ອ. ກອງແລໄດ້ນໍາເອົາກໍາລັງ ວຽດມິນເຂົ້າໄປຄອບຄອງ ແລະມ້າງເພແຂວງຊຽງຂວາງ. ສະພາບການບ້ານເມືອງ ໄດ້ປ່ຽນແປງຍ້ອນ ລັດທິຄອມມຸຍນິສຕ໌, ປະຊາຊົນຟ່າຍຂວາຢູ່ໃນແຂວງຊຽງຂວາງ ໄດ້ແຕກພ່າຍໜີໄປເປັນອົພະຍົບຢູ່ຕ່າງປະເທສ (ສ່ວນຫລາຍແມ່ນສະຫາຣັຖ) ໂດຍຕິດຕາມທ່ານນາຍພົນ ວ່າງປາວ, ຈຶ່ງຖືວ່າໄດ້ລອດພົ້ນມາໄດ້ເທົ່າທຸກວັນນີ້ ຍ້ອນບູນປາຣະມີຂອງທ່ານນາຍພົນ ປົກປ້ອງແທ້.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# 9. ທ່ານເຈົ້າເມືອງ ລາວໄທ ທວາລືວ່າງ



ທ່ານ ລາວໄທ ທວາລືວ່າງ ເກີດ ວັນທີ່ 01 ເດືອນ ພຶສພາ (May) ປີ 1942 ຢູ່ເມືອງໂຮງນົມແຂວງຫົວພັນ. ໃນປີ 1948, ໄດ້ມາເຂົ້າໂຮງຮຽນ ຢູ່ເມືອງຊຳເໜືອ ແຂວງຫົວພັນ. ໃນປີ 1953, (ອາຍຸ 12 ປີ) ໄດ້ເຂົ້າເປັນ ທະຫານ ເອດີຊີ (ADC =Auto Defense Chock) ໜ່ວຍຕໍ່ຕ້ານຕາມແຕ່ລະເຂດກັບ ຝຣັ່ງ ຢູ່ເຂດ ພູຜາທີ, ເປັນພີ່ອ້າຍຂອງ ພັນຕຣີ ເກັຍຕູ້ ທວາລີ ວ່າງ ຜ.ບ ກອງຮ້ອຍທີ່ຮັກສາ ພູຜາທີ

(ໃນຍາມສົງຄາມຮ່ວມກັບສະຫາຣັຖ ແມ່ນ ຜ.ບ ກອງພັນ) ໃນວັນທີ່ 1 ເດືອນມັງກອນ (January) ປີ 1959, ອາຍຸ 18 ປີ ໄດ້ຮັບໃຊ້ເປັນຂ້າຣາຊການຢູ່ກະຊວງມະຫາດໄທ ຢູ່ຫ້ອງການແຂວງໆຫົວພັນ ເມືອງຊຳເໜືອ ພາຍໃນ 6 ເດືອນ ໄດ້ຖືກແຕ່ງຕັ້ງຈາກເຈົ້າແຂວງ ຫົວພັນ ທ່ານ ທົງສວັດ ໃຫ້ໄປເປັນຜູ້ຮອງເຈົ້າເມືອງໆຊອ່ນ ໃກ້ໆຊາຍແດນແຂວງ ຫລວງພຣະບາງ ແລະຊຽງຂວາງ.

ໃນປີ 1960, ກອງແລ ປະຕິວັດ ຢູ່ວຽງຈັນທນ໌ ພາໃຫ້ລາວຄອມມຸຍນິສຕ໌ ແລະ ແກວຄອມມຸຍນິສຕ໌ ໄປໂຈມຕີແຂວງຫົວພັນ. ຫລາຍພື້ນທີ່ ໃນແຂວງ ຫົວພັນໄດ້ຕົກໃຫ້ຄອມມຸຍນິສຕ໌. ພັນຕຣີ ເກັຍຕູ້ ທວາລີ ວ່າງ ໄດ້ນຳພາ ນຶ່ງກອງຮ້ອຍ ທະຫານແຫ່ງຊາຕ ແລະ ສາມກອງຮ້ອຍທະຫານ ເອ ດີ ຊີ (ADC) ເຂົ້າປ່າ ຕໍ່ສູ້ເຖິງເດືອນຕຸລາ (October) ປີ 1961. ທ່ານ ນາຍພົນຕຣີ ວ່າງປາວໄດ້ສັ່ງໃຫ້ ຂ້າ ຣາຊການ, ທະຫານ, ແລະ ຕຳຣວຈທຸກຄົນ ທີ່ໄດ້ຕໍ່ສູ້ຄອມມຸຍນິສຕ໌ ໃຫ້ພາກັນໄປເຕົ້າໂຮມກັນຢູ່ຄ້າຍທະຫານ ຫວ້ຍຕົມ ໃນເຂດແດນຊຽງຂວາງຢູ່ໃກ້ໆຫວ້ຍສະອານ ແລະຫົວເມືອງ, ແຂວງຫົວພັນ. ທ່ານ ພັນຕຣີ ເກັຍຕູ້ໄດ້ຮັບຄຳສັ່ງໃຫ້ກັບຄືນໄປຍຶດ ພູຜາທີ ແລະໃຫ້ ພ.ອ ສີສຸວັນ ກັບໄປຍຶດເອົາເມືອງເປີນ ຄືນໃຫ້ໄດ້.

ໃນວັນທີ່ 2 ເດືອນກຸມພາ (February) ປີ 1962, ພັນຕຣີ ເກັຍຕູ້ ວ່າງ ຍຶດໄດ້ພູຜາທີ. ທ່ານນາຍພົນວ່າງປາວ ໄດ້ສັ່ງ ທ່ານ ພ.ອ. ຕົງວາ ລໍ ພ້ອມດ້ວຍ ຄນະກັມະການໄປສຶກສາພູຜາທີ ແລ້ວ ປະກອບກອງພັນເອສຢີຢູ (SGU, Special Guerilla Unit ) ຂື້ນ. ທຸກຄົນໄດ້ເຫັນດີໃຫ້ ທ່ານເຈົ້າເມືອງ ລາວໄທ ທວາລີ ວ່າງ ເປັນ ຜ.ບ. ກອງພັນ1301 ເຂດ 13A ຢູ່ ຫວ້ຍຄຳມູນ ທິສຕາວັນອອກສຽງເໜືອຂອງພູຜາທີ (LS 85).

ໃນປີ 1965, ທາງກະຊວງມະຫາດໄທໄດ້ລົງດຳຣັດແຕ່ງຕັ້ງ ທ່ານລາວໄທ ທວາລີ ວ່າງ ໄປດຳຣົງຕຳແໜ່ງເຈົ້າເມືອງໆໂຮງນົມ, ແຂວງຫົວພັນ ແລະ ຕຳແໜ່ງ ຜ.ບ. ກອງພັນ 1301.

ໃນເດືອນກຸມພາ (February) 1968, ຄອມມຸຍນິສຕ໌ໄດ້ ລຸກລານແຂວງຫົວພັນ ຢ່າງຮ້າຍແຮງ ຈຶ່ງເຮັດໃຫ້ພູຜາທີ ແລະຫລາຍໆຈຸດ ໄດ້ຕົກໄປຢູ່ໃນກຳມືຂອງຄອມມຸຍນິສຕ໌ວຽດນາມເໜືອ. ທະຫານ ແລະ ປະຊາຊົນຕ້ອງໄດ້ ອົພະຍົບໄປຢູ່ແຂວງຊຽງຂວາງ, ຢູ່ພູແຊ່, (LS 255) ທິສໃຕ້ເມືອງເດຊາ ຫລື ເມືອງຈ້າ.



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໃນປີ 1969, ທ່ານເຈົ້າເມືອງ ລາວໄທ ທວາລີ ວ່າງ ໄດ້ຂໍລາອອກຈາກຕໍາແໜ່ງນາຍທະຫາຣ ຈຶ່ງກໍາໂດຽສະເພາະຕໍາແໜ່ງເຈົ້າເມືອງເທົ່ານັ້ນ ຢູ່ເມືອງໂຮງນິນ ມີປະຊາຊົນອົພະຍົບມາຈາກແຂວງ ຫົວພັນນໍາທ່ານຫລາຍພັນຄອບຄົວ. ປະຈຸບັນທ່ານເຈົ້າເມືອງລາວໄທ ທວາລີ ວ່າງໄດ້ອົພະຍົບໄປຢູ່ ສະຫາຣັຖ, ຣັຖມິເນໂຊຕາ.

## 10. ນັກບິນເຮືອອາກາສ ຮ້ອຍເອກ ເຕ-28 ວ່າງບີ



**ຣ.ອ.ອ. ວ່າງບີ** ເກີດເດືອນຕຸລາ ວັທີ່ 15 ເດືອນຕຸລາ (October) 1944 ທີ່ບ້ານນໍ້າບູ ຕາແສງ ຖໍ້າຕາດເມືອງຫງາດ ແຂວງຊຽງຂວາງ ປະເທສລາວ, ມີພີ່ນ້ອງຮ່ວມ ພໍ່ແມ່ ດຽວກັນ 10 ຄົນ: ຊາຍ 5 ຄົນ ຍິງ 5 ຄົນ. ອ້າຍນອ້ງ ທຸກຄົນໄດ້ ມາຕັ້ງຖິ່ນຖານຢູ່ໃນສະຫາຣັຖ.

ເມື່ອເຕີບໂຕອາຍຸໄດ້ 8 ຫາ 9 ຂວບ ເຫັນ ເຄື່ອງບິນຝຣັ່ງເສສ ໄດ້ບິນຜ່ານໄປມາຢູ່ເທິງອາກາສ ເພື່ອໄປ ສູ້ຮົບ ກັບວຽດມິນຢູ່ ດຽນບຽນຟູ , ພໍ່ແມ່ ຜູ້ເຖົ້າໄດ້ຈົ່ມວ່າ ເຮືອບິນໄດ້ບິນໄປໆມາໆຢູ່ເທິງອາກາສແບບນີ້ ສຖານະການຕ້ອງປັ່ນປ່ວນເປັນແນ່ ແລະ ຈະບໍ່ມີຄວາມສງົບ. ໃນປີ 1956 ຫາປີ 1957, ວ່າງບີໄດ້ໄປ ເຂົ້າໂຮງຮຽນຢູ່ເມືອງງານ ຄູສອນ ເປັນຄົນລາວ. ສຖານະການໄດ້ປ່ຽນແປງ ລາວຮອມລາວ ຄນະປະເທດ ລາວ ແລະ ຝ່າຍຣັດຖະບາລ ວຽງຈັນທນ໌ ໄດ້ມີ ການຂັດແຍ້ງກັນ ເກີດຂຶ້ນ ຍ້ອນ ກອງແລ ໄດ້ທໍາການ ຣັຖະປະຫາຣ ຢູ່ນະຄອນວຽງຈັນທນ໌, ວ່າງບີ ຢ້ານບໍ່ມີຄວາມປອດພັຍ ຈຶ່ງໄດ້ຂາດ ການ ໄປໂຮງຮຽນ, ແຕ່ບໍ່ດົນເທົ່າໃດ ກໍໄດ້ໄປເຂົ້າໂຮງຮຽນຢູ່ລ່ອງແຈ້ງ ແມ່ນ ສະຫາຣັຖ ໄດ້ໄປໃຫ້ການຊ່ວຍເຫລືອ ພາຄ 2.

ໃນປີ 1963, ວ່າງບີ ໄດ້ລົງໄປຮຽນໜັງສືຢູ່ ນະຄອນ ວຽງຈັນທນ໌ ແຕ່ຍ້ອນການຂາດເຂີນ, ຫ່າງ ໄກຈາກ ພໍ່ແມ່ ການຮຽນຈຶ່ງໄດ້ຢຸດລົງໄດ້ກັບໄປຢູ່ລອ່ງແຈ້ງ ແລະໄດ້ເຂົ້າໄປເຮັດວຽກນໍາສະຖານີວິທະຍຸ ລາວຮອມເຜົ່າ ຈົນກະທັ້ງປີ 1966. ສັດຕຣູໄດ້ບຸກໂຈມຕີຝ່າຍມິຕ ຫລາຍບ່ອນແຕ່ເໜືອຕລອດໃຕ້ ໄດ້ ເຮັດໃຫ້ ສຖານະການຮູນແຮງຂຶ້ນ. ຜູ້ບັນຊາການທະຫາຣ ພາຄ 2 ຕ້ອງການນັກບິນ ເພື່ອຊ່ວຍ ເຫລືອ ທາງອາກາສຈຶ່ງຈະສາມາດ ຕໍ່ສູ້ກັບ ສັດຕຣູໄດ້. ທ່ານນາຍພົນ ວ່າງປາວ ຈຶ່ງໄດ້ມີຄໍາສັ່ງເກັບເກັນເອົາ ຊາຍໜຸ່ມເຜົ່າມົ້ງໄປຮຽນຂັບເຄື່ອງບິນ ເຕ 28. ພວກຊາຍໜຸ່ມຫລາຍຄົນໄດ້ໄປຮຽນຂັບເຄື່ອງບິນ ແລ້ວ ໄດ້ກັບໄປປະຕິບັດໜ້າທີ່ຢູ່ພາຄ 2. ນັກບິນລຸ້ນທີ່ສາມ ມີ 11 ຄົນ ດ້ວຍກັນ ໄປຮຽນ ທີ່ປະເທສໄທຍ໌, ເລີ່ມ ຕົ້ນ ຮຽນຂັບເຄື່ອງບິນນ້ອຍ ມີຊື່ວ່າ (Piper Cub150) ນັ່ງໄດ້ສອງຄົນ, ຕໍ່ໄປຮຽນຂັບເຄື່ອງບິນ(Cessna 180) ນັ່ງໄດ້ 4 ຄົນ. ເມື່ອມີການຮຽນຂັບຂີ່ເຄື່ອງບິນສອງຊະນິດນີ້ ໄດ້ດີ ລຶ້ງແກ່ນແລ້ວ ຈຶ່ງໄດ້ກັບຄືນໄປ ສວັນນະເຂຕ ປະເທສລາວ.

ໃນຕົ້ນປີ 1970 ໄດ້ໄປຮຽນຂັບເຄື່ອງບິນ (T41 ຫລື Cessna) ທີ່ລົງເດີນ ດ້ວຍລໍ້ໜ້າ ເໝືອນ


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ເຄື່ອງບິນ ເຕ 28. ພວກນັກບິນລາວສູງ "ນິ້ງ" ທຸກຄົນໄປຮຽນມາ ໄດ້ຮັບຄຳຍ້ອງຍໍຢ່າງດີຈາກ ຄູຝຶກໄທ໌ຍ ແລະ ຄູຝຶກ ອາເມຣິກັນ ເພາະວ່າ ການລົງແລະການຂຶ້ນເດີນ ໄດ້ດີເປັນພິເສດ ໂດຍ ສະເພາະແມ່ນການບິນທີ່ເອີ້ນວ່າ (SteepTurn) ໄດ້ໄປຮຽນພາ ສາອັງກິດຢູ່ ນະຄອນວຽງຈັນທນ໌ ໃນ ລະຍະສັ້ນ.

ໃນປີ 1970 ກໍໄດ້ກັບໄປຮຽນຂັບເຄື່ອງບິນ ເຕ 28 ທີ່ປະເທສໄທຍ໌ ຮຽນພາຄ ປະຕິບັຕຖິ້ມລະເບີດແບບໃນສນາມລົບ. ໃນການສອບເສັງຖິ້ມລະເບີດ ນັກບິນ ວ່າງບີ ໄດ້ທີ່ໜຶ່ງ ນັກບິນ ຊີງກົວ ໄດ້ທີ່ສອງ ນັກບິນທັ້ງສອງໄດ້ຮັບຄຳຍ້ອງຍໍຈາກ ຜ.ບ. ກອງທັພອາກາສລາວ ແລະຫົວໜ້າຄຣູ ຝຶກອາ ເມຣິກັນ ທີ່ອຸດອນ ເປັນພິເສດວ່າ: ບໍ່ເຄີຍມີນັກຮຽນ ຣຸ່ນໃດທຳໄດ້ ດີເໝືອນນັກຮຽນ ສອງຄົນນີ້.

ໃນຕົ້ນປີ 1971 ໄດ້ກັບຄືນໄປ ລ່ອງແຈ້ງ ຊຶ່ງເປັນເຂຕ ກັນດານ ທີ່ ສັດຕຣູ ມີປືນ ປ.ຕ.ອ ຫລາຍກວ່າເຂດ ອື່ນໆໃນອິນດູຈີນ ກໍວ່າໄດ້ ໂດຽສະເພາະໃນປີ 1971 ສັດຕຣູໄດ້ລຸກຣົບໂຈມຕີຝ່າຍມິຕ ຫລາຍຈຸດ. ໄດ້ ບິນອອກປະຕິບັຕງານຕາມຄຳສັ່ງຂອງ ຜ.ບ. ພາຄ 2 ຢ່າງບໍ່ມີເວລາ ພັກຜ່ອນ. ນັກບິນທຸກຄົນໄດ້ບິນຕາມຄຳສັ່ງ ບໍ່ໄດ້ບິນໄປຕາມແຜນການ ຈຶ່ງໄດ້ບິນຕໍ່ສູ້ສັດຕຣູ ຈົນ**ບິນ**ກາຍສະຖິຕິ ຂອງໂລກ. ຈົນເວົ້າໄດ້ວ່າ ບໍ່ມີນັກບິນປະເທສໃດໄດ້ບິນຫລາຍຖ້ຽວຕໍ່ມື້ ຕໍ່ເດືອນ ແລະ ຕໍ່ປີ ຄືນັກບິນໃນ ພາຄ 2. ນັກບິນ ວ່າງບີ ເລົ່າຕໍ່ໄປວ່ານັກບິນຣູ່ນທີ່ສາມ ແມ່ນຣູ່ນໄດ້ທຳລາຍ ສັດຕຣູ ຫລາຍກ່ວາທຸກໆຣູ່ນ, ໂດຽສະເພາະໄດ້ທຳລາຍປືນ ປ.ຕ.ອ. ຈົນເກືອບຮາບຄາບທຸກຈຸດ. ນັກບິນ ວ່າງບີ ສາມາຖຂັບເຄື່ອງບິນ ເຖິງ ສາມຊະນິດເຊັ່ນ: ເຄື່ອງ ບິນເຕ 28 (T28, Cessna 180, Baron) ແຊສນາ ແລະ ບາຣອນ ໃຫ້ ຜ.ບ. ພາຄ 2. ການບິນອອກໄປປະຕິບັຕງານບາງຄັ້ງກໍເສັຍຂວັນ ເພາະຖືກ ປ.ຕ.ອ. ຂອງສັດຕຣູຍິງ ແຕ່ກໍສາມາຖລອດໄປໄດ້ ຫລາຍຄັ້ງ ດ້ວຍໂຊຕຊະຕາບໍ່ຄາດຕາຍ.

ໃນປີ 1973 ນັກບິນວ່າງບີ ຖືກຍິງຢູ່ເມືອງໝອກ ຈຶ່ງໄດ້ໂດດຈ້ອງອອກຈາກ ຍົນຕ໌ ແມ່ນນັກບິນອາເມຣິກາ (Air America Capt. Hood Chopper 96 W) ບິນໄປຊ່ວຍ ໄດ້ຢ່ອນເຊືອກລົງໄປເອົານັກບິນ ວ່າງບີ ຂຶ້ນມາຢ່າງປອດພັຍ. ຢູ່ທີ່ນັ້ນເກືອບສາມຊົ່ວໂມງຈຶ່ງອອກມາໄດ້. ພວກສັດຕຣູຮູ້ ແຕ່ເຂົາ ຍ່າງ

ໄປບໍ່ທັນ. ນັກບິນວ່າງບີໄປເຖິງ ລອ່ງແຈ້ງ ເກືອບຄ່ຳ. ນັກບິນ ວ່າງບີ ບໍ່ເຄີຍຈົ່ມວ່າອິດເມື່ອຍເລີຍ, ບໍ່ເຄີຍຂັດຄຳສັ່ງ ຂອງຜູ້ບັນຊາ, ບໍ່ເຄີຍເປັນຄົນຂີ້ຢ້ານ ອວດຕົວ ຫລື ເຫັນແກ່ຕົວ ແລະບໍ່ຂີ້ໂມ້ ເປັນຄົນເຮັດແທ້ທຳຈິງ ຍ້ອນຄວາມຮັກຊາຕແລະຮັກປະເທສ ທີ່ໃຫ້ກຳເນີດເຕີບໂຕ ແລະ ເປັນທີ່ອາສັຍ. ໃນວັນທີ່ 5 ເດືອນເມສາ (April) 2008 ນັກບິນ ວ່າງບີ ໄດ້ລົ້ມເຈັບນໜັກ ໃນວັນທີ່ 20 ເດືອນມັງກອນ (January) ປີ 2011 ຍັງບໍ່ທັນດີເທື່ອ.

## 11. ທ່ານອາຣິຍະ ລີຟູງ



ເກີດວັນທີ່ 28 ມິຖຸນາ 1944 ທີ່ຫລວງພຣະບາງ, ເປັນລູກຊາຍກົກຂອງທ່ານຕູ້ເລັ້ຍ ລີຟູງ ແລະ ເຈົ້າຄຳແພງ ວົງກົຕຣັຕນະ (ລູກສາວສາທຸພໍ່ເຖົ້າ ຄຳໝັ້ນ ວົງກົຕຣັຕນະ ເຊື້ອສາຍວັງໜ້າແລະວັງກາງ ແຫ່ງອານາຈັກຫລວງພຣະບາງ).


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ທ່ານ ອາຣິຍະ ມີນ້ອງຊາຍ 2 ຄົນ ແລະ ນ້ອງຊາຍຮັກ (ຊື່ບຸນມີ, ເປັນທະຫານ ເສັຍຊີວິຕຢູ່ແນວໜ້ານໍ້າບາກ ໃນປີ 1964), ແລະ ນ້ອງສາວລ້ຽງ 2 ຄົນ (ທີ່ປະຈຸບັນນີ້ ຢູ່ເມືອງ St-Petersburg ຣັຖຟລໍຣິດາ ສະຫະຣັຖອະເມຣິກາ).

- ຮຽນເຖິງຊັ້ນ ມ.ສ.5 ຂອງມັທຍົມພາຄປາຍທີ່ວິທຍາລັຍຫລວງພຣະບາງ.
- ໃນເດືອນມີນາ 1964 ໄປຮຽນວິຊາຜູ້ຄວບຄຸມກະສິກັມ ທີ່ ກຸງພນົມເປັນ ແລະເປຣັກລຽບ ປະເທສຂເມຣ. ຮັບປະກາສນິຍະບັຕ ວິຊາການກະເສຕຊັ້ນສູງ ເດືອນມິຖຸນາ 1968:

ວັນທີ່ 2 ກັນຍາ 1968: ຖືກບັນຈຸເຂົ້າເປັນຂ້າຣາຊການຊັ້ນໂທ ຢູ່ອະນຸກຣົມສົ່ງເສີມກະສິກັມ ຢູ່ວຽງຈັນ (ນຳທ່ານບຸນນອງ ສີພາ, ທ່ານໂອຣິສ ຈຸລມຸນຕຣີ, ທ່ານສຸພັນ ສວັສດີ, ແລະເຈົ້າ ສົມສວາທວົງກິຕ).

ເດືອນມະກະຣາ ຫາ ເດືອນພຶສພາ 1969: ເປັນຜູ້ຮ່ວມງານ ກັບອົງການສຳຣວຈ ແລະ ສຶກສາຫາຂໍ້ມູລ ຈາກປະເທສໂຮລລອງ ກ່ຽວກັບການກູ້ຢືມເງິນມາພັທນາ ໂຄງການທົ່ງຮາບວຽງຈັນຫນ໌. ຕິດຕາມຄນະ ຜູ້ຊ່ຽວຊານ ໄປຢ້ຽມຢາມເຂຕພັທນາ ຊຳທອງ-ລ່ອງແຈ້ງ ເດືອນສິງຫາ ຫາເດືອນທັນວາ 1969: ໄປຝຶກງານດ້ານສະຫະກອນ ການກະເສຕ ທີ່ສະຖາບັນນານາຊາຕ ທີ່ ກຸງເຕລ-ອາວິຟ, ປະເທສອິສຣາເອລ.

ເດືອນພຶສພາ 1970 ຫາເດືອນກັນຍາ 1971: ຕິດຕາມຜູ້ຊ່ຽວຊານອິສຣາເອລໄປປະຈຳຢູ່ສະຖານີ ທົດລອງການກະເສຕລາວ-ອິສຣາເອລ ຫາດດອກແກ້ວ.

ເດືອນກັນຍາ ຫາ ເດືອນທັນວາ 1971: ໄປຝຶກງານດ້ານສະຫະກອນການກະເສຕ ທີ່ສະ ຖາບັນເພື່ອພັທ ນາການກະເສຕໃນເອເຊັຍ ທີ່ກຸງໂຕກຽວ ປະເທສຍີ່ປຸ່ນ.

ເດືອນມະກະຣາ 1972 ຫາເດືອນທັນວາ 1974: ຖືກແຕ່ງຕັ້ງເປັນຫົວໜ້າກະສິກັມ ປະຈຳແຂວງໄຊຍະບຸຣີ ແລະຮ່ວມງານນຳໂຄງການຝາຍນໍ້າຕານ-ເມືອງພຽງ. ໃນຕົ້ນປີ 1973: ຕິດຕາມ ຂບວນໄປຕັ້ງດ່ານເມືອງພຽງ.

ເດືອນມີນາ 1973: ໄປອົບຮົມດ້ານການສຳຣວຈພຶກສະສາສຕ໌ທີ່ສະຖາບັນ ໄບໂອຕຣັອບ ເມືອງໂບ ກໍຣ໌ ອິນໂດເນເຊັຍເວລາ 5 ອາທິຕຍ໌.

ເດືອນມິຖຸນາ 1973 ຫາ ເດືອນເມສາ 1974: ໄປອົບຮົມດ້ານ Post-Graduate Course in Comprehensive Rural Regional Development Planning ທີ່ ເມືອງເຣໂຮວອຕ, Israël. ແລ້ວກັບຄືນໄປຫາດດອກແກ້ວ ແນໃສ່ການຈັດສັນ ນິຄົມເພື່ອການກະເສຕ ສຳຫລັບຈັດຕັ້ງຖິ່ນຖານບັນດາທະຫານ ທີ່ຈະຖືກປົດປ່ອຍອອກຈາກກອງທັພ.

ເດືອນມະກະຣາ 1975 ເຖິງເດືອນມະກະຣາ 1976: ຖືກໂອນໄປຢູ່ອົງການເຂົ້າແຫ່ງຊາຕ ເປັນ


**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ພະນັກງານຫາຊື້ແລະເກັບມ້ຽນເຂົ້າເປືອກ ຢູ່ພາຄໃຕ້ແລະພາຄເໜືອ. ຖືກສິ່ງຕໍ່ເຂົ້າສັມມະນາພິເສສ ທີ່ສະພາ ແຫ່ງຊາຕ ແລ້ວລົງພື້ນຖານ ຢູ່ຕາແສງນາໄຊຍ໌ ເມືອງໄຊຍະເຊສຖາ.

ວັນທີ່ 10 ມະກະຣາ 1976: ຕັດສິນໃຈເນຣະເທສຕົນເອງ ອອກຈາກແຜ່ນດິນກໍາເນີດ ຫລັງຈາກ ທີ່ສັງເກຕວ່າ ມັນບໍ່ມີຫຍັງທີ່ສອດຄ້ອງກັນເລີຍຣະຫວ່າງ ຈິຕໃຈຂອງສັນຍາ ອະນຸສັນຍາວຽງຈັນຫນ໌ ແລະ ການກະທໍາຢູ່ໃນພາຄປະຕິບັຕຕົວຈິງຂອງຊີວິຕປະຈໍາວັນ. ວັນທີ່ 24 ພຶສພາ 1976: ອອກເດີນ ທາງຈາກ ແຄ້ມປ໌ ຜູ້ລີ້ພັຍ ອໍາເພີເມືອງໜອງຄາຍເຂົ້າສູ່ກຸງເທພ. ວັນທີ່ 2 ມິຖຸນາ 1976: ຖືກສົ່ງ ໄປຢູ່ສູນຮັບຮອງ ພວກລີ້ພັຍການເມືອງຢູ່ເມືອງແມັຕຊ໌ ແຂວງໂມແຊລ (Metz MOSELLE).

ເດືອນກັນຍາ 1976: ເຂົ້າເປັນຄົນງານຂອງໂຮງງານ ຜລິຕແລະປະກອບກະປຸກເກັຍ ເປີໂຊຊີ ໂຕຣແອນ ແມັຕຊ໌-ບອກນີ (Usine Peugeot-Citroën de Metz-Borny-57).

ເດືອນເມສາ1978: ໄປອົບຮົມເປັນຄຣູຝຶກພວກລີ້ພັຍທີ່ເມືອງມາກໄຊຍ໌. ແຕ່ເດືອນພຶສພາ 1978 ຫາເດືອນກັນຍາ1980: ເປັນຄຣູຝຶກພວກລີ້ພັຍຈາກລາວ ປະຈໍາຢູ່ສູນ ຮັບຮອງພວກລີ້ພັຍ 2 ແຫ່ງ ໃນ ແຂວງຕາກນ໌ (TARN). ເດືອນກໍຣະກະດາ 1978: ເຂົ້າຮັບການອົບຮົບວິຊາຄຣູ ທີ່ເມືອງນ້ອງຕ໌- ແຊັງຕ໌- ແອກ ແບັລງ.

ເດືອນກັນຍາ 1980 ຫາ ເດືອນກຸມພາ 1985: ເປັນຮອງຜູ້ອໍານວຍການ ສູນຮັບຮອງ ພວກລີ້ພັຍ ຈາກ ອາຊີຕະວັນອອກສ່ຽງໃຕ້ແລະທຸກແຫ່ງ ຢູ່ແຂວງໂອດ (AUDE).

ເດືອນມິຖຸນາ 1985 ຫາ ເດືອນສິງຫາ 1986: ເຂົ້າຮັບການອົບຮົມວິຊາຮັກສາຄວາມປອດພັຍທີ່ Penchard. ແຕ່ເດືອນຕຸລາ 1986 ຫາເດືອນຕຸລາ 1991: ເປັນພນັກງານຮັກສາຄວາມປອດພັຍ ຢູ່ ທະນາ ຄານ Union des Banques de Paris ແລະພະນັກງານຮັບສັນຍານເຕືອນພັຍ ຂອງທະນາຄານ ອອມສິນແລະ ສິນເຊື່ອ.

ແຕ່ເດືອນຕຸລາ 1991 ຫາເດືອນພຶສຈິກາ 1997: ເປັນຜູ້ຮັບສະແດງບົທບາທ ເຈົ້າໜ້າ ທີ່ຮັກສາ ຄວາມປອດພັຍ ຢູ່ສວນມະຫາສະນຸກ Euro-Disney, ເປັນຄຣູຝຶກພາຄສນາມ ດ້ານຮັກສາ ຄວາມປອດ ພັຍ, ຖືກເລືອກເປັນຜູ້ຮັບສະແດງບົທບາທດີເດັ່ນຂອງເດືອນພຶສຈິກາ 1994. ແຕ່ເດືອນພຶສ ຈິກາ 1997 ຫາ ເດືອນມະກະຣາ 2003: ຂໍໂອນໄປຢູ່ພະແນກຕ້ອນຮັບຢູ່ສາງ. ເດືອນມະກະຣາ 2003 ຫາ ເດືອນ ພຶສພາ 2010: ຖືກໂອນໄປເປັນພະນັກງານສົ່ງສິນຄ້າຣາຄາແພງ.

ແຕ່ງງານຢູ່ດົງໂດກ ວັນທີ່ 8 ມີນາ 1970 ກັບນາງບົວຄໍາ ແດວວັນ ຂ້າຣາຊການຄຣູ ລູກ ສາວກົກ ທ່ານຄຣູ ເພັຍຫຍຸ້ນ ແດວວັນ ແລະ ນາງເພັຍບຸນທັນ ບ້ານສັງຂະໂລກ ເມືອງຫລວງ ພຣະບາງ. ມີລູກ 4 ຄົນ, ຍິງ 3 ຊາຍ 1, ຫລານຊາຍ 4 ແລະຈະໄດ້ຫລານຍິງໃນເວລາອັນໃກ້ໆນີ້. ຖືສັນ ຊາຕຝຣັ່ງເສສແຕ່ວັນ ທີ່ 2 ກັນຍາ 1978 ເປັນຕົ້ນມາ. ປະຈຸບັນນີ້ ທ່ານອາຣິຍະ ລີຜູງ ຢູ່ປະເທດ ຝຣັ່ງເສສ.


Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## 12. ທ່ານນາຍກອງປະຈ້າລີ ລີເຢັ່ງວື

ເກີດວັນທີ່ 18 ເດືອນກຸມພາ ປີ 1907 ຢູ່ໜອງແຮດ, ແຂວງຊຽງຂວາງ. ລູກຊາຍຄົນດຽວຂອງ ລີວື ແລະ ນາງເຊັຍທ່າວ. ປະມານອາຍຸໜຶ່ງປີ ພໍ່ໄດ້ເສັຍຊີວິດ, ແມ່ໄດ້ແຕ່ງງານໃໝ່ ກັບນ້ອງຊາຍຊື່ໄຊສີ ລີເຢັ່ງວື. ປະຈ້າລີ ເຢັ່ງວື ໄດ້ເຕີບໂຕຂື້ນຈາກພໍ່ນ້າ ແລະມີພີ່ນ້ອງຮ່ວມພໍ່ນ້າ ຊາຍ 5 ຄົນແລະຍິງ 4 ຄົນ. ເປັນເດັກສລາດແຂງແຮງ ແລະ ເກັ່ງດົນຕຣີພື້ນເມືອງ. ນອກນັ້ນ ຍັງອ່ານ, ຂຽນພາສາລາວເກັ່ງສົມຄວນ ແລະປາກພາສາຝຣັ່ງເສສເປັນອີກດ້ວຍ. (ຮູບເບີ 4.ຂ).

ໄດ້ແຕ່ງງານກັບຍິງສາມຄົນດັ່ງນີ້:

1-ນາງເຈັ້ຍ ລໍ ມີລູກດ້ວຍກັນ 7 ຄົນ (ຊາຍ 4 ແລະ ຍິງ 3 ຄົນ)

2-ນາງຍີວ ທ່າວ ມີລູກ 1 ຄົນ ຕິດຕາມແມ່ມາ (ມົ້ງມົວ) ມາເອົາທ່ານປະຈ້າ ມີ  ລູກຮ່ວມ ກັນເປັນຊາຍ 5 ຄົນ ແລະ ຍິງ 2 ຄົນ (ຮວມເປັນ 8 ຄົນທັ້ງໝົດ)

3-ນາງຢາ ຊົງ ມີລູກດ້ວຍກັນ 9 ຄົນ (ຊາຍ 7 ຄົນ ແລະ ຍິງ 2 ຄົນ.)

ໃນປີ 1945 ທ່ານໄດ້ຮ່ວມກັບທ່ານເຈົ້າແຂວງສາຍຄຳ, ທ່ານຕູ້ບີລີຝຸງ, ທ່ານຕູ້ເລັ້ຍ ລີຝຸງ ຕໍ່ສູ້ກັບ ລປລ, ວຽດມິນ, ແລະຍີປູ່ນ. ໃນປີ 1946 ປົດປ່ອຍຕົວເມືອງຊຽງຂວາງ, ທົ່ງໄຫຫີນ, ຫລວງພຣະບາງ (ໃນວັນທີ່ 13 ເດືອນພຶດສພາ (May) ປີ 1946, ແລະ ຊາຍແດນແຂວງ ຊຽງຂວາງ ຕິດກັບແຂວງ ວຽງຈັນ ດັ່ງນີ້: ປົດປ່ອຍ ສະລາພູຄູນ, ເມືອງພູນ, ວັງວຽງ, ບ້ານຊອ້ນນາຊູ.  ຫລັງຈາກ ລປລ ແຕກອອກໄປປະເທສໄທ໌ຍແລ້ວ ໄດ້ກັບມາຊຽງຂວາງ.

ໃນປີ 1947 ໄດ້ເປັນນາຍກອງປົກຄອງປະຊາຊົນຊາວເຜົ່າລາວໃນພາຄໃຕ້ແຂວງຊຽງຂວາງ ທີ່ມີ 6 ຕາແສງດັ່ງນີ້:  ຕາແສງຜາ, ຕາແສງ ນາວັງ, ຕາແສງ ຜາໄຊຍ, ຕາແສງຜານົກກົກ, ຕາແສງປັງໄຊຍ ແລະ ຕາແສງແປັນຜາ (ແມ່ນເຜົ່າຂະມຸ).

ໃນປີ 1953 ຫາ 1954 ວຽດມິນ ແລະ ລາວອິສສະຣະໄດ້ເຂົ້າມາໂຈມຕີທົ່ງໄຫຫີນ ແລະ ທົ່ວໄປໃນແຂວງຊຽງຂວາງ. ທ່ານປະຈ້າລີ ມີໜ້າທີ່ປ້ອງກັນ ແລະ ກວດລ້າງວຽດມິນ ລາວອິສສະຣະ ໃນພາກໃຕ້ແຂວງຊຽງຂວາງ, ໃຫ້ການສນັບສນູນຝ່າຍຝຣັ່ງເສສ ກູ໊ມ ຢີຊີເອມແອ (GCMA) ທີ່ປ້ອງກັນທົ່ງໄຫຫີນ ແລະ ໄດ້ສົ່ງທະຫາຣໄປໄລ່ຕິດຕາມ ພວກວຽດມິນທີ່ມາລຸກລານຊຽງຂວາງ ຈົນໄປເຖິງຈຸດຕ່າງໆ ດັ່ງນີ້: ຈາກທົ່ງໄຫຫີນ ໄປຫາເມືອງຊຽງຂວາງ, ຫາເມືອງພາງ -ເມືອງງານ, ຖ້ຳທ້າວ, ນ້ຳປີ  ຈົນໄປເຖິ່ງເມືອງວິນ ປະເທສ ອານາມ.

ທ່ານປະຈ້າລີ ແມ່ນນັກຕໍ່ສູ້ຄົນສຳຄັນຄົນໜຶ່ງໃນສໄມສົງຄາມຝຣັ່ງເສສ ມາປົກຄອງລາວ ແລະ ເປັນຜູ້ນຳຄົນໜຶ່ງ ທີ່ໄດ້ປະຕິບັດໜ້າທີ່ຂອງຕົນຢ່າງດີຕໍ່ປະເທສຊາຕບ້ານເມືອງ.

ທ່ານໄດ້ເຖິງແກ່ກັມ ໃນວັນທີ່ 7 ເດືອນ ມີນາ (March) ປີ 1967 ຢູ່ລ່ອງແຈ້ງ ອາຍຸ ປະມານ 60 ປີ. ໄດ້ມີບຸກຄົນສຳຄັນຫລາຍທ່ານໄດ້ມາຮ່ວມໃຫ້ກຽດພິທີງານສົບຂອງທ່ານດັ່ງ: ພຣະຍາຕູ້ບີ ລີຝຸງ ຕາງ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ໜ້າພຣະມະຫາກະສັດລາວ, ທ່ານຄຳຫລ້າ ກິ່ງສັກດາ ອະທິບໍດີກົມການປົກຄອງແຫ່ງພຣະຣາຊອານາຈັກລາວ, ທ່ານ ລີເຈີ ລີເຢັ່ງວື ຜູ້ແທນຣາຊດອນ ໃນສະພາແຫ່ງຊາຕໃນພຣະຣາຊອານາຈັກລາວ, ສາທຸເຈົ້າແຂວງສາຍຄຳ ສຸທະກະກຸມາຣ ເຈົ້າແຂວງຊຽງຂວາງ, ທ່ານນາຍພົນ ວ່າງປາວ ຜ.ບ. ເຂຕທະ ຫາຣພາຄ 2 ແຫ່ງພຣະຣາຊອານາຈັກລາວ, ບັນດານາຍທະຫາຣ, ຕຳຣວດຂ້າຣາຊການ, ກອງກຽດຕິຍົດ ແລະ ປະຊາຊົນ ຫລາຍກວ່າ ສິບພັນຄົນ ໄດ້ມາໄຫວ້ອາໄລງານສົບຂອງທ່ານປະຈ້າລີໃນຄັ້ງນີ້.

*ໃນນາມຂ້າພະເຈົ້າເປັນລູກຊາຍຂອງທ່ານປະຈ້າລີ ຂ້າພະເຈົ້າຮູ້ສຶກຄູນຄ່າຂອງພໍ່, ບູນຄູນໃນຄວາມຮັກ ຂອງຜູ້ນຳ ແລະພີ່ນ້ອງທຸກຄົນ ຈຶ່ງໄດ້ບັນທຶກໄວ້. (ຂໍຂອບໃຈນຳທ່ານ ນາຍທະຫາຣ ລີບຣົງລີເຢັງວື.)*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ພາດທີ່ 21.

## ກາບກອນເກົ່າຂອງລາວແລະຮູບພາບທີ່ມີຄວາມໝາຍ



*ຮູບທີ່ 198. ລາວເຮົາເປັນຄົນທີ່ມີນິດໃສດີ, ສູພາບອ່ອນຫວານ ແລະນັບຖືຊື່ງກັນແລະກັນ ແຕ່ໃດມາ*

ກາບກອນປະເທສຊາຕ

ປະເທສຂ້ອຍຊັ້ນຊື່ເມືອງລາວ ລວງກວ້າງ ຍາວສຸດຕາ ເຫລືອອ່ານ
ນ້ຳຂອງ ໄຫລຜ່າທາງກາງ ມີຫີນທາງຖນົນສະອາດ
ປະເທສຊາຕລາວໃຫ່ຍໄພສານ ເຮົາລູກຫລານເກີດມາພາຍຊອ້ຍ
ຄວນຊູ່ຊ່ວຍສ້າງບ້ານເມືອງລາວ ໃຫ້ຍືນຍາວຕໍ່ໄປພາຍໜ້າ
ຢ່າໃຫ້ຫລ້າເຂົາແທ້ ໝູ່ລາວ.

ກາບກອນ ສັນຊາຕລາວ

ເກີດເປັນລາວ ຕ້ອງຮັກລາວຊ່ວຍເຫລືອລາວ
ເກີດເປັນລາວ ຕ້ອງຂຍັນໝັ່ນປະກອບ
ສິ່ງໃດຊອບລາວ ສູ້ຢ່າງຊູ່ຂັນ
ເຮົາເປັນລາວ ຊາຕລາວຕ້ອງຮັກກັນ
ໃຈຜູກພັນສມັກຄີ ສຸດດີເອີຍ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ກາບກອນທຳມະຊາດໃນເມືອງລາວ

ຟັງສຽງເສືອສີງຊ້າງ ຄະນອງເນື່ອງໃນປ່າ
ມີທັ້ງຈີບຈາບຈູ ຈາແຈ້ງສິ່ງສຽງ
ແລະເບິ່ງລະມັ່ງມ້າ ມອງໝູ່ມະຫິງສາ
ບາງພອ່ງອືງຄະນີງສຽງ ສິ່ງແຮງແຮ່ຮອ້ງ
ມອງທີ່ຍູງຍາງໄມ້ ຝຸງຊະນີທັງຄ່າງ
ຫລີງລຳແລໝາກໄມ້ ຄະໂຍງຍື່ຍອງໄປ.

ກາບກອນທາດຫລວງ

ໃນດານແດນດິນພື້ນ ນະຄອນສີສັດຕະນາຕ
ຍິນສະນຸກມ່ວນແມ້ງ ເມືອງຟ້າບໍ່ໄປປານ
ພໍເມື່ອໝົດເຂດຟ້າ ເດີນດ່ວນລະດູຝົນ
ເດືອນສິບສອງເພງພໍ ພູງພະແຂໄຂແຈ້ງ
ຝູງຊຳຊິນໄປໄຫວ້ ເຈດີພະທາດໃຫ່ຍ
ຈູດໝູ່ທຽນທູບໄຕ້ ບູຊາເຈົ້າໜໍພຸດໂທ.

ກາບກອນແມ່ນ້ຳລຳທານ

ແລເຫັນຟ້າມືດຄື້ມ ຄະນິງແຫ່ງບັງບົດ
ເຮົາສອ່ງແນມນ້ຳຂອງ ທ່າເວີນວັງກວນ
ເຫັນແຕ່ອືມຄືມຟ້າ ຍາມແລງລົມລວ່ງ
ພັດໝູ່ເມັກແລະເຟື້ອ ໄຫລກົ້ວກໍ່ກວມ
ບາງພອ່ງເປັນຊໍ່ຊອ້ງ ເງື່ອມໂງ່ນງາມ
ສະເມີບ້າງພອ່ງ ມີສັນສີສິ່ງ
ມອງເມີນຊູ້ ຫລີງທ່າເວີນວັງກວ້າງ
ເຫັນເຮືອຂື້ນລ່ອງ ລົມພັດຟອງຍວກຍູ້
ຍິນສະອື້ນ ອອ່ນໃຈ

ກາບກອນການສຶກສາ

ໃນໂຮງຮຽນໝູ່ດຽວຂອງຂ້ອຍ ໃຫ່ຍແລະນ້ອຍເປັນໝູ່ດຽວກັນ
ຂ້ອຍຜູກພັນຮັກຫອມບໍ່ຂາດ ຄືດັ່ງຍາດພໍ່ແມ່ດຽວກັນ
ຂ້ອຍບໍ່ນັບຍາມຄູເພີ່ນສັ່ງ
ໝູ່ຂ້ອຍນັ່ງເປັນຖັນເປັນແຖວ ບໍ່ບົນແຊວຖຽງກັນວິວາດ



Unforgettable Laos (PDF version in Lao) – Updated on June 13, 2015
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

ຂ້ອຍແມ່ນຊາຕລາວແທ້ຮ່ວມກັນ   ໃນໂຮງຮຽນມີຄູຫລາຍຢ່າງ
ຄູເພິ່ນສັ່ງສອນໃຫ້ເຮົາດີ   ສອນວິທີໜັງສື ແລະ ເລຂ
ນັບເປັນແຮກ   ຄວາມຮູ້ຫລາຍອັນ
ຂ້ອຍຂະຫຍັນໄປຮຽນບໍ່ຂາດ   ໃຜປະມາດບໍ່ຮູ້ໜັງສື
ຄົນນັ້ນຄືກັນກັບຄົນຕາບອດ   ຕາບໍ່ສອດເຫັນແຈ້ງບ່ອນໄປ

<u>ກາບກອນຄອບຄົວ</u>

ໃນຄອບຄົວເຮືອນຊານຂອງຂ້ອຍ   ເອື້ອຍອ້າຍຊ່ວຍພໍ່ແມ່ຄົວກິນ
ຂ້ອຍໄດ້ຍິນນ້ອງນ້ອຍຂ້ອຍແອ່ວ   ໃຫ້ແຈວ່ໆຫາແມ່ກິນນົມ
ຂ້ອຍໄປໂຈມອູ້ມນ້ອງຕາງແມ່   ເອື້ອຍແລະແມ່ຂອງຂ້ອຍດີໃຈ
ຂ້ອຍບໍ່ໄປທ່ຽວແລ່ນເລາະຫລິ້ນ   ກິນເຂົ້າແລ້ວຫາອ່ານໜັງສື ບໍ່ເຮັດຄື
ເໝືອນຕັ້ງແຕ່ ກ່ອນ.

**<u>ກາບກອນວັດ</u>**

ຢູ່ບ້ານຂ້ອຍມີວັດວາສາລາ   ວັນສິນມາເພິ່ນໄປຟັງເທສ
ບູນພະເວສເພິ່ນແຫ່ກັນຫລອນ   ຂ້ອຍອອນຊອນຄູບາເພິ່ນເທສ
ໃຫ້ລະເຫດຄວາມຊົ່ວປາປັງ   ຂ້ອຍໄປຟັງນຳຝູ່ງຜູ້ເຖົ້າ ບໍ່ປາກເວົ້າແຊວລິ້ນໃສ່ກັນ

**<u>ກາບກອນຄວາມຮັກ</u>**

ຢູ່ດ່ຽວປ່ຽວກາຍ ແສນສະບາບແຕ່ບໍ່ສະນຸກ  ຢູ່ສອງຄອງທຸກແສນສະນຸກແຕ່ບໍ່ສະບາຍ
ຢູ່ບ້ານນອກແສນມີຊີວິດແຕ່ຫາກບໍ່ມີຊີວາ   ຢູ່ໃນເມືອງແສນມີຊີວາແຕ່ຫາກບໍ່ມີຊີວິດ

<u>ສຽງຂອງສັຕຣ໌</u>

ສ່ຽງນົກຈ່າຈ່າ   ສຽງໝາເຫົ່າບໍ່ຄວນເອົາໄວ້ໃນໃຈຄິດ.

<u>ສຸພາສິດສອນວ່າ:</u>

ເອົາເມັຍໜູ່ມເທົ່າກັບເຝົ້າງົວແມ່ເກົ້າໂຕ   ມີເມັຍເຖົ້າເທົ່າກັບ  ມີແມ່ເກົ້າຄົນ

<u>ສຸພາສິດສອນວ່າຢ່າໃຫ້ມີນິໄສດັ່ງນີ້</u>:

ລູກໄພ້ ເບິ່ງແມ່ຍ່າ ຄືຜີປອບ   ແມ່ຍ່າເບິ່ງ ລູກໄພ້ ເໝືອນຜີຮ່າ



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

<u>ສຸພາສິດສອນວ່າ ຈົ່ງພິສູດສັດແລະຄົນດັ່ງນີ້</u>:

ຫົນທາງ ພິສູດ ມ້າ

ວັນເວລາ ພິສູດ ຄົນ

## ຮູບພາບທີ່ມີຄວາມໝາຍ



*<u>ຮູບທີ່ 199</u>. ພະທາດຫລວງຕັ້ງຢູ່ໃນ ນະຄອນວຽງຈັນທນ໌ປະເທສລາວ ທີ່ ປະຊາຊົນລາວໄດ້ສະຫລອງປະເພນີຕ່າງໆ ໃນທຸກໆປີ ຂອງເດືອນທັນວາ (December)*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 200. ທົ່ງໄຫຫີນ ທີ່ງົດງາມ ຕັ້ງຢູ່ໃນທົ່ງໃນແຂວງຊຽງຂວາງ*

ໃນຣາຊອານາຈັກລາວ ມີຫລາຍຊົນຊາຕຊົນເຜົ່າຄື: ເຜົ່າລາວລຸ່ມ, ເຜົ່າລາວເທີງ, ເຜົ່າລາວສູງ ຫລື ເຜົ່າມົ້ງ, ເຜົ່າຢ້າວ, ເຜົ່າໄທດຳ,ໄທຂາວຕໍ່ໆໄປ ປະມານ 60 ຊົນຊາຕຊົນເຜົ່າຢູ່ໃນຣາຊອານາຈັກລາວ. ເຜົ່າຢ້າວ ເປັນເຜົ່າໜຶ່ງທີ່ຮ່ວມການ ຕໍ່ສູ້ປ້ອງກັນ ການຂຍາຍຕົວຂອງຄອມມຸຍນິສຕ໌ ໄປໃສ່ເອເຊັຍ ຕາວັນອອກສ່ຽງໃຕ້ ຜ່ານປະເທສລາວ ຈຶ່ງເກີດສົງຄາມຢູ່ໃນລາວສມັຍ ປີ 1960-1975, ເຜົ່າຢ້າວ ຕັ້ງຖິ່ນຖານບ້ານເກີດ ຢູ່ພາຄເໜືອຂອງຣາຊອານາຈັຈລາວ ສ່ວນຫລາຍ ແມ່ນຢູ່ນ້ຳຍູ້ ພາຄ 1 ຜູ້ນຳ ແມ່ນເຈົ້າຫລ້າ ບໍ່ຮູ້ຂ່າວວ່າເພິ່ນໄດ້ອົພຍົບໄປຢູ່ໃສ່. ແມ່ນທ່ານເຈົ້າຫລ້າ ໄດ້ສົ່ງກອງທະຫາຣຫລາຍ ກອງພັນໄປຊ່ວຍພາຄສອງ ໃນການໂຈມຕີ ເອົາທີ່ໝັ້ນຄືນຢູ່ພູຜາໄຊ໌ຍ, ພູຫລວງໝາດ ແຖວບ້ານຫີນຕັ້ງ LS74 ຫລາຍຄັ້ງ. ເຜົ່າຢ້າວ ກໍແມ່ນນັກລົບທີ່ກ້າຫານ ແລະເດັຈດ່ຽວ ໃນຍາມສົງຄາມ.

ການນຸ່ງຫົ່ມຂອງຊາວລາວທຸກເຜົ່າ ກໍງົດງາມ ແລະຄົນກໍງາມດັ່ງຮູບຕໍ່ໄປນີ້.



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 201</u>. ນາງສາວຊາວລາວ ເຜົ່າມົ້ງທີ່ງາມພ້ອມ ຊຸດແຕ່ງກາຍ(ກະຍື້ງຢາງ)*



*<u>ຮູບທີ່ 202</u>. ນາງໄມປະຢາງ ຄົນງາມ ແລະ ເຄື່ອງນຸ່ງກໍງາມ (2004).*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 203. ນາງສາວລາວ ຟ້ອນອວຍພອນປີໃໝ່ ທີ່ວັດທາດຫລວງໃນປີ 1960*



*ຮູບທີ່ 204. ນາງສາວຊາວລາວພວນແຂວງຊຽງຂວາງ ທີ່ງາມແລະໜ້າຮັກທີ່ສຸດ ທີ່ນັ່ງຢູ່ແຄມເຂື່ອນນ້ຳງື່ມ ແຂວງວຽງຈັນທ໌. ໃນປີ 1968 ທ່ານນາຍພິນ ວ່າງປາວ ໄດ້ຂົນປະຊາຊົນ ຊາວຊຽງຂວາງປະມານ 20 ກວ່າພັນມາຕັ້ງຖິ່ຖານຢູ່ທາລາດ ແຄມເຂື່ອນນ້ຳງື່ມ ແຂວງວຽງຈັນທ໌.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 205</u>. ແມ່ນນາງສາວຊົນເຜົ່າຢ້າວທີ່ຕໍ່ສູ້ຮ່ວມກັນ ໃນຍາມສົງຄາມ ວຽດນາມ 1960-1975*




*<u>ຮູບທີ່ 206</u>. ນາງສາວຊົນຊາວເຜົ່າລາວສູງ "ມົ້ງ"  ທີ່ ສປປລ ນຸ່ງເຄື່ອງຊຸດຍາມບູນປີໃໝ່ ປີ 1999*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 207</u>. ຊຸດແຕ່ງກາຍແລະປະເພນີການຟ້ອນ ຂອງຊົນຊາວເຜົ່າລາວ ຢູ່ທີ່ນະຄອນວຽງຈັນທນ໌ ສະໄມພຣະຣາຊອາຈັກລາວ*



*<u>ຮູບທີ່ 208</u>. ນາງສາວລາວ ແລະ ຊຸດເຄື່ອງນູ່ງງາມ ແລະ ຟ້ອນງາມດ້ວຍ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*ຮູບທີ່ 209. ຮູບຍາແມ່ ຜູ້ສຳຄັນທັງຫລາຍໃນພາຕ 2 ກຳລັງຢືນຖ້າຕ້ອນຮັບ ພຣະເຈົ້າມະຫາຊີວິດ ສຣີສວ່າງວັທນາ ໃນປີ 1965. ຈາກຊ້າຍໄປຂວາ ຄື 1. ພັລຍາທ່ານທັງຊາວ, 2. ພັລຍາທ່ານທອງ ວົງຣາຊມີ, 3. ພັລຍາທ່ານຜັນ ສີຫາຣາຊ, 4. ພັລຍາທ່ານນາຍພົນວ່າງປາວ, 5. ພັລຍາທ່ານພິມພາ, 6. ພັລຍາເຈົ້າສາຍຄຳ ສຸທະກະກຸມາຣ, 7. ພັລຍາທ່ານຕູ້ເຢີ ລີຟູງ, 8. ພັລຍາທ່ານສິນ ວິຈິດວົງສາ, 9. ພັລຍາທ່ານຕຸບີ ລີຟຸງ, 10. ບໍ່ຣູ້ຊື່, 11 . ພັລຍາທ່ານ ພ.ອ. ລີ ຊ້າງ, 12. ພັລຍາ ພ.ອ. ຕູ້ລື ມົວ, ແລະ 13. ພັລຍາທ່ານມົວທ່າງ.*

# ຮູບພົ່ນອ້ງ"ມົ້ງ" ຢູ່ຕ່າງປະເທສທີ່ເປັນຕົວຢ່າງໃນສັງຄົມລູ່ນໃໝ່





*ຮູບທີ່ 210 (ຂ້າງຊ້າຍ). ທ່ານ ອີເວີ ວ່າງ ຫລື ທ່ານວ່າງເຢັຍ ນັກຊ່ຽວຊານ ຂັ້ນປະຣິນຍາເອກ ດ້ານໄຟຟ້າ (Electrical Engineer) ຄົນຜູ້ທຳ ອິດຂອງເຜົ່າລາວສູງ "ມົ້ງ" ແລະ ພັລຍາ ນາງວ້າ ລີຟູງ ຝ່າຍຍີງ ຜູ້ທຳອິດ ຂອງ ເຜົ່າລາວສູງ ທີ່ໄດ້ຮຽນຈົບ ຝ່າຍແພທ (Medical Medecine). ຮູບທີ່ 211 (ຂ້າງຂວາ). ທ່ານ ວ່າງຊ້າງ ຜູ້ສລາດໃນການນຳພາ ສະມາຄົມຄອບຄົວລາວ ເພື່ອຊອກຫົນທາງໃຫ້ຊາວອົພຍົບ ມີ ຄວາມກ້າວໜ້າດ້ານການມາຕັ້ງຖິ່ນຖາຊີວິດໃໝ່ໃນ ຣັຖ ມີເນໂຊຕາທາງພາຄເໜືອ ຂອງສະຫະຣັຖ ອາເມຣີກັນ ຕັ້ງ ແຕ່ 1982-2010.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com



*<u>ຮູບທີ່ 212</u>. ທ່ານ ອາຣິຍະ ລີຟຸງ ແລະ ພັລະຍາ ນາງບົວຄຳ. ທ່ານລີຟຸງ ໄດ້ເປັນຜູ້ຊ່ວຍແປງປຶ້ມເປັນພາສາລາວແລະຊອກເອກະສານຕ່າງໆມາໃຫ້ ຈຶ່ງກາຍເປັນປຶ້ມປະວັຕກ່ຽວກັບເຫຕການຕ່າງໆ ທີ່ໄດ້ເກີດຂຶ້ນໃນຫລາຍປີຜ່ານມາ ຂອງຣາຊອານາຈັກລາວ. (ອ່ານປະວັດ ຂອງທ່ານ ອາຣິຍະ ໃນຕອນ ຊີວະປະວັຕທີ່ໄດ້ຂຽນໃຫ້ຄວາມເຫັນກ່ຽວກັບສະຖານະການຢູ່ໃນປະເທສລາວ.)*



*<u>ຮູບທີ່ 213</u>. ຈາກ ຊ້າຍຫາຂວາ ທ່ານຕູ້ຝື ວ່າງ, ທ່ານ ວ່າງເຢີ ແລະ ທ່ານ ເລັງ ວອງ (ເລັງ ວ່າງ) ແມ່ນ ຄນະ ທີ່ໄດ້ ຕັ້ງອົກຕັ້ງໃຈເຮັດວຽກ ໃນການນຳພາ ຊາວອົພຍົບ ທີ່ມາຕັ້ງຖິ່ນຖານ ຊີວິດໃໝ່ ໂດຽສເພາະ ແມ່ນພາຄເໜືອຂອງສະຫະຣັຖອາເມຣິກັນ.*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

## ຄນະຜູ້ນຳ ທີ່ເຮັດໃຫ້ມີພາຄ 2  ແລະນຳພາໃຫ້ຢູ່ລອດມາໄດ້ເຖິງປີ 1975



*<u>ຮູບທີ່ 214.</u> ທ່ານນາຍພົນ ພູມີ ໜໍສະຫວັນ*



*<u>ຮູບທີ່ 215</u>. ທ່ານ ນາຍພົນ ວ່າງປາວ*



*<u>ຮູບທີ່ 216</u>. ທ່ານເຈົ້າແຂວງສາຍຄຳ ສຸທະກະກຸມາຣ*



*<u>ຮູບທີ່ 217</u>. ພຣະຍາ ດຳຣົງຣິທິໄກ ຕູ້ບີ ລີຝູງ*



**Unforgettable Laos (PDF version in Lao) – Updated on June 13, 2015**
All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com

# ຮັບຮູ້ເອກາສິດແລະຂອບໃຈນຳເຈົ້າຂອງຮູບ

ຮູບແລະແຜນທີ່ຕ່າງໆທີ່ເອົາມາອອກໃນປຶ້ມນີ້ ໄດ້ຮັບມາຈາກຜູ້ມີເອກາສິດ ດັ່ງມີລາຍຊື່ຕໍ່ໄປນີ້. ຜູ້ຂຽນ ຂໍ ສແດງຄວາມຂອບອົກຂອບໃຈ ນຳພວກທ່ານທັງຫລາຍ ທີ່ໄດ້ໃຫ້ໂອກາດ ເຜີຍແຜ່ ສິ່ງທີ່ພວກເຮົາ ເຄີຍ ໄດ້ຮູ້ໄດ້ເຫັນມາ ໃຫ້ລູກຫລານຜູ້ເກີດໃໝ່ໃຫຍ່ລຸນ ຮັບຊາບ ແລະເອົາໄປວິເຄາະ ວິໃຈເອົາເອງ ເພື່ອ ຄວາມ ຈະເຣີນຮຸ່ງເຮືອງ ຂອງເມືອງລາວເຮົາ ໃນອານາຄົດ.

Geu Vang collection
Mr. Arnaud Lyfoung
Mr. Vang Xang
Personal account of Kaysone Phomvihane's activities during the war in Laos
"*The CIA's Secret War in Laos",* by Kenneth Conboy & James Morrison
Mr. Chong Tua Moua and Haze, "*Guerre Secrete en Indochine, 1950-1955",* by Lt. Col Michel David
Roger Warner, *"Out of Laos"*)
Mrs. Tougeu Lyfoung
Mr. Yves Vang's collection
Mai Paj Yang
Col. Max Messnier, France
Mr. Yang Lue
Mr. Pham Khamsouane, the son of Lt. Pham Van Duong
Book "Biography of Gen. Kong Le"
Col. Tom Lum
Somchay Siharath (Col. Phanh Siharath's daughter)
Larry Woodson
Mr. Noah Vang, Minnesota
Mr. Leng Wong, Minessota
Mr. Bounchanh, France
Xang Vang collection
Gale L. Morrison, "*The Sky Is Falling"*
Mr. Lao Thai Wa Lue Vang
Kaying Yang collection
John Pimlott, "*Vietnam: the History and the Tactics*"
Pilot Vang By
Pilot Vang Khang collection
National Geographic 1974 vol.145 No1.
"*Shadow war.* T*he CIA's Secret War in Laos*", by Kenneth Conboy and James Morrison
*"Souphanouvong",* by Douangsay Luangphasy
Fact Finding Commission, France
Mr. Lue Yang
Col. Thao Bone collection.
Noah Vang collection
Book of Chao Boun Oum
Lt. Col. Tou Ya Noah Vang collection
Phoumi Vongvichit and his wife (from Phoumi's book of memoirs)
Col. Tom Lum
Col. Vang Youa son
Mrs. Halinka Luangpraseut
Phonekeo Sayasane collection


All rights reserved to Geu VANG. Unauthorized printing, distributing, and selling this document is forbidden
www.unforgettable-laos.com


(Ssumao)
Menghai
Chinghung
Dien Bien
Muong Sai
Keng Tung
Mong Hsat
Houei Sai
(Ft. Carnot)
Chiang Rai
Luang Prabang
Sayaboury
Mekong
Nan
Phrae
Udon
Phitsanulok
(SIAM)
Ubon
Seno
Khong Sedone
Ngoc Linh 8524
Hoi An
Chu Lai
Quang Ngai
Ch'inchou
Peihai
Luichow
Peninsula
Hainan Strait
Lingshui
Chinmu Chiao
Phou Loi